# ກະຊວງອຸດສາຫະກຳ ແລະ ການຄ້າ

## ກົມແຜນການ ແລະ ການຮ່ວມມື

# ບົດວິໄຈການເຊື່ອມໂຍງເຂົ້າສາກົນດ້ານການຄ້າ

# ສະບັບປັບປຸງ ປີ 2022

## ແຜນພັດທະນາຂະແໜງການຄ້າ & ພາກທຸລະກິດ



ສະໜັບສະໜູນໂດຍ: EIF Enhanced Integrated Framework

30 ພຶດສະພາ , 2022





ກົມແຜນການ ແລະ ການຮ່ວມມື
ກະຊວງອຸດສາຫະກຳ ແລະ ການຄ້າ

# ບົດວິໄຈການເຊື່ອມໂຍງເຂົ້າສາກົນດ້ານການຄ້າ

## ແຜນພັດທະນາຂະແໜງການຄ້າ & ພາກທຸລະກິດ
## ສະບັບປັບປຸງ ໃນປີ 2022

ພຶດສະພາ 30, 2022



# ສາລະບານ


ບົດສະແດງຄວາມຮູ້ບຸນຄຸນ ........................................................................................................X

ສາລະບານຄຳຫຍໍ້............................................................................................................................XI

ຄຳນຳ ..........................................................................................................................................XIII

ບົດສະຫລຸບຫຍໍ້.................................................................................................................................1

1. ຮຽກຮ້ອງໃຫ້ມີການປະຕິຮູບດ້ານທຸລະກິດ ແລະ ການຄ້າຕື່ມອີກ ເພື່ອໃຫ້ເກີດຄວາມທົ່ວເຖິງ, ຄວາມຫຼາກຫຼາຍ, ການສ້າງວຽກເຮັດງານທຳໃຫ້ກວ້າງຂວາງ ແລະການຫຼຸດຜ່ອນຄວາມທຸກຍາກ.........................................................1

2. ອົງປະກອບຫຼັກຂອງຍຸດທະສາດທີ່ໄດ້ປັບປຸງເພື່ອຫຼຸດຜ່ອນຕົ້ນທຶນທາງການຄ້າ...............................................2

3. ຂໍ້ສະເໜີແນະສຳລັບຂະແໜງການ ...........................................................................................................3

ບົດທີ1: ບົດເປີດຫົວເລື່ອງ..........................................................................................................................15

ບົດທີ 2: ພາບລວມຂອງເສດຖະກິດມະຫາພາກ, ສະພາບແວດລ້ອມທີ່ເອື້ອອຳນວຍແກ່ການດຳເນີນທຸລະກິດ ແລະ ບົດ DTIS ປີ 2012 ....................................................................................................................................19

2.1 ພາບລວມຂອງເສດຖະກິດມະຫາພາກ .....................................................................................................19

2.2 ສະພາບແວດລ້ອມທີ່ເອື້ອອຳນວຍໃຫ້ທຸລະກິດ..............................................................................................22

2.3 ການຈັດຕັ້ງປະຕິບັດບົດ DTIS ສະບັບປັບປຸງ 2012 ....................................................................................26

2.4 ບັນດາບົດຮຽນຈາກບົດ DTIS 2012 ......................................................................................................30

ບົດທີ 3 ຜົນງານການເຄື່ອນໄຫວຂອງການຄ້າ...................................................................................................33

3.1 ພາບລວມຂອງຜົນງານການເຄື່ອນໄຫວຂອງການຄ້າໃນໄລຍະຫລັງໆມານີ້ ...................................................33

3.2 ຜົນກະທົບຕໍ່ການຄ້າ ຂອງການຫລຸດພົ້ນຈາກສະຖານະພາບປະເທດດ້ອຍພັດທະນາ.................................41

3.3 ການຄ້າບໍລິການ .................................................................................................................................43

3.4 ການຄ້າທາງເອເລັກໂຕຣນິກ ...................................................................................................................45

3.5 ບົດບາດຍິງ-ຊາຍ ແລະ ການຄ້າ..............................................................................................................47

3.6 ການເງິນເພື່ອການຄ້າໃນ ສປປ ລາວ.........................................................................................................49

ບົດທີ 4 ນະໂຍບາຍການຄ້າ ......................................................................................................................53

4.1 ຕົ້ນທຶນການຄ້າ.....................................................................................................................................55

4.2 ຕາຕະລາງອັດຕາພາສີ ແລະ ນະໂຍບາຍການຄ້າ .......................................................................................57

4.3 ບັນດາມາດຕະການກີດກັນການຄ້າທີ່ບໍ່ແມ່ນພາສີ ......................................................................................61

4.4 ມາດຕະການການຄວບຄຸມລາຄາເປັນຮູບແບບການກີດກັນການຄ້າທີ່ບໍ່ແມ່ນພາສີ .........................................63

4.5 ພື້ນຖານໂຄງລ່າງ ທາງດ້ານຄຸນນະພາບແຫ່ງຊາດ (NQI) ..............................................................................63

ບົດທີ 5 ການຄຸ້ມຄອງຊາຍແດນ, ໂລຊິດສະຕິກການຄ້າ ແລະ ການເຊື່ອມຈອດ.....................................................67

5.1 ຜົນງານການເຄື່ອນໄຫວ (ຫລື ປະສິດທິພາບ) ທາງດ້ານໂລຊິດສະຕິກດ້ານການຄ້າ ແລະ ດ້ານການຄ້າຂ້າມຊາຍແດນຂອງ ສປປ ລາວ ........................................................................................................................68

5.2 ໂລຊິດສະຕິກ ແລະ ການຂົນສົ່ງ ..............................................................................................................70

5.3 ຂອບຂ່າຍດ້ານການຈັດຕັ້ງອົງການ ຂອງການຂົນສົ່ງ ແລະ ໂລຊິດສະຕິກ..........................................................74

ບົດທີ 6 ກະສິກຳ ແລະ ທຸລະກິດການກະເສດ: ບັນດານະໂຍບາຍດ້ານການຄ້າ ແລະ ດ້ານການຄຸ້ມຄອງດັດສົມ..........77
6.1 ບົດສະເໜີ......................................................................................................................77
6.2 ການມີໂອກາດໃນການໃຊ້ວັດຖຸປະກອນຮັບໃຊ້ກະສິກຳ ......................................................78
6.3 ບາງຂະແໜງກະສິກຳທີ່ໄດ້ຄັດເລືອກເອົາ: ການເຕີບໂຕ ແລະ ການປ່ຽນແປງໂຄງປະກອບ ..........................85
ບົດທີ 7 ການທ່ອງທ່ຽວ ........................................................................................................111
7.1 ເປີດຫົວເລື່ອງ ................................................................................................................111
7.2 ຂະແໜງການທ່ອງທ່ຽວໃນ ສປປ ລາວ.....................................................................................112
7.3 ຂອບຂ່າຍດ້ານລະບຽບການ....................................................................................................118
7.4 ການປ່ຽນແປງໃນອຸດສາຫະກຳການທ່ອງທ່ຽວໂລກ ແລະ ຜົນກະທົບຕໍ່ຂະແໜງການທ່ອງທ່ຽວຂອງ ສປປ ລາວ ......................................................................................................................126
7.5 ກາລະໂອກາດ ແລະ ສິ່ງທ້າທາຍ .........................................................................................126
7.6 ຂໍ້ສະເໜີແນະ...................................................................................................................128
ບົດທີ 8 ອຸດສາຫະກຳປຸງແຕ່ງ ແລະ ເຂດເສດຖະກິດພິເສດ.........................................................131
ລາຍຊື່ເອກະສານອ້າງອີງ.....................................................................................................141
ເອກະສານຊ້ອນທ້າຍ ກ ແຜນພັດທະນາຂະແໜງການຄ້າ ແລະ ພາກເອກະຊົນ 2012 ສະຖານະພາບໃນປີ 2021....147

# ສາລະບານຕາຕະລາງ


ຕາຕະລາງທີ 1.1 ບັນດາສະມາຊິກ ຂອງ TPSWG ........ 6

ຕາຕະລາງ 1.2 ວິທີການລວມ ຂອງແຜນງານໂຄງການ: ແຜນດຳເນີນງານການພັດທະນາຂະແໜງການຄ້າ ແລະ ເອກະຊົນ (ຂອບຜົນໄດ້ຮັບ) ........ 9

ຕາຕະລາງ 1.3 ຂອບຂ່າຍ ຂອງ M&E ເສົາຄ້ຳທີ 1: ສະພາບແວດລ້ອມດ້ານການຄ້າ ແລະ ການລົງທຶນໄດ້ມີການເສີມຄວາມເຂັ້ມແຂງ ........ 10

ຕາຕະລາງ 1.4 ຂອບຂ່າຍ M&E ເສົາຄ້ຳທີ 2: ຄວາມສາມາດໃນການແຂ່ງຂັນໃນຂະແໜງກະສິກຳ, ການທ່ອງທ່ຽວ ແລະ ອຸດສາຫະກຳປຸງແຕ່ງ ໄດ້ຮັບການປັບປຸງ ........ 11

ຕາຕະລາງ 1.5 ແຜນດຳເນີນງານຂອງຂະແໜງການຄ້າ ແລະພາກທຸລະກິດເອກະຊົນໃນຮ່າງບົດ DTIS ທີ່ໄດ້ປັບປຸງໃໝ່ ສະບັບປັດຈຸບັນ ປີ 2022 ........ 12

ຕາຕະລາງ 2.1 ຂອບແຜນດຳເນີນງານການພັດທະນາຂະແໜງການຄ້າ ແລະ ພາກທຸລະກິດເອກະຊົນໃນບົດ DTIS (2012) ........ 29

ຕາຕະລາງ 3.1 ອັດຕາພາສີທີ່ບໍ່ເປັນໄປຕາມແບບເດີມສຳລັບ ສປປ ລາວ ພາຍຫລັງການຫລຸດພົ້ນຈາກສະຖານະພາບປະເທດດ້ອຍພັດທະນາ ........ 41

ຕາຕະລາງ 3.2 ສ່ວນແບ່ງ ຂອງການປົກຄຸມຂອງການຊົມໃຊ້ໂທລະຄົມມະນາຄົມ ແລະ ອິນເຕີເນັດ, 2018 ........ 45

ຕາຕະລາງ 4.1 ກະຊວງ ແລະ ອົງການຂອງລັດຖະບານທີ່ກ່ຽວຂ້ອງໃນວຽກງານການຄ້າ ........ 54

ຕາຕະລາງທີ 4.2 ຕາຕະລາງລາຍການສິນຄ້າຕາມລະຫັດຍ່ອຍ 8 ຕົວເລກ ໃນສາລະບານເອກະພາບ ຂອງ ສປປ ລາວ ປີ 2018 ........ 58

ຕາຕະລາງ 4.3 ຈຳນວນລາຍການສິນຄ້າຕາມລະຫັດພາສີຍ່ອຍ 8 ຕົວເລກ ແບ່ງຕາມຂະແໜງ ແລະ ອັດຕາພາສີ MFN ສະເລຍຄາດຄະເນ ........ 58

ຕາຕະລາງ 4.4 ມາດຕະການກີດກັນການຄ້າທີ່ບໍ່ແມ່ນພາສີ ແຍກຕາມອົງການຈັດຕັ້ງທີ່ອອກມາດຕະການ ........ 62

ຕາຕະລາງ 4.5 ການແຈກຢາຍ NTM ຂອງ ສປປ ລາວ ຕາມປະເພດ ........ 63

ຕາຕະລາງ 5.1. ICDs ທີ່ຖືກສະເໜີຊື່ ........ 71

ຕາຕະລາງ 5.2 ການຂົນສົ່ງຫລາຍຮູບແບບ ແລະ ການບໍລິການດ້ານໂລຊິດສະຕິກທີ່ມີມູນຄ່າເພີ່ມ ........ 73

ຕາຕະລາງ 5.3 ຂໍ້ຈຳກັດ ໃນການເຂົ້າມາສູ່ວົງການ ຂອງຂະແໜງການຂົນສົ່ງ ແລະ ໂລຊິດສະຕິກ ........ 74

ຕາຕະລາງ 6.1 ອັດຕາພາສີນຳເຂົ້າ ຂອງ ສປປ ລາວ ໃນປີ 2020 ສຳລັບວັດຖຸປະກອນຮັບໃຊ້ກະສິກຳ ທີ່ເລືອກມາ ........ 80

ຕາຕະລາງ 6.2 ການປ່ຽນແປງໃນດ້ານການຜະລິດພືດຜັກ ຂອງ ສປປ ລາວ: 2009-2018 ........ 92

ຕາຕະລາງ 6.3 ບັນດາແຂວງທີ່ຜະລິດກາເຟໃນ ສປປ ລາວ 2009-2018 ........ 96

ຕາຕະລາງ 6.4 ປະເພດຂອງການລ້ຽງງົວ ໃນ ສປປ ລາວ: 2016 ........ 102

ຕາຕະລາງທີ 7.1 ບັນດາໂຄງການດ້ານການທ່ອງທ່ຽວ ........ 123

ຕາຕະລາງ 8.1 ເຂດເສດຖະກິດພິເສດ ຂອງ ສປປ ລາວ ........ 133

ຕາຕະລາງ 1: ບົດ DTIS ຂອງ ສປປ ລາວ ປັບປຸງໃໝ່ - ຂອບການຕິດຕາມ & ປະເມີນຜົນ ພ້ອມດ້ວຍຕົວຊີ້ວັດຂອງເປົ້າໝາຍ ແລະ ລະດັບຜົນອອກມາ ........ 147

ຕາຕະລາງ 2: ຂອບຂ່າຍການຕິດຕາມ ແລະ ປະເມີນຜົນ (M&E) ........ 158

ຕາຕະລາງ 3: ຂອບຂ່າຍການຕິດຕາມ ແລະ ປະເມີນຜົນ (M&E) ເສົາຄ້ຳທີ 2: ຄວາມສາມາດແຂ່ງຂັນ ........ 196

ຕາຕະລາງ 3: ຂອບຂ່າຍການຕິດຕາມ ແລະ ປະເມີນຜົນ (M&E) ເສົາຄ້ຳທີ 2: ຄວາມສາມາດແຂ່ງຂັນ ........ 213

# ສາລະບານຮູບສະແດງດ້ວຍກະຣາຟ


ຮູບ 2.1 ການປະກອບສ່ວນຂອງການເຕີບໂຕ ແລະ ສ່ວນແບ່ງແຍກຕາມຂະແໜງການຕົ້ນຕໍ ....20

ຮູບ 2.2 ການດຳເນີນທຸລະກິດ 2012, 2016 ແລະ 2020 ....22

ຮູບ 2.3 ການຈັດລະດັບການດຳເນີນທຸລະກິດ ສຳລັບ ສປປ ລາວ ....23

ຮູບ 2.4 ການເລີ່ມຕົ້ນທຸລະກິດ ຈາກບົດລາຍງານການເຮັດທຸລະກິດ ປີ 2020 ....24

ຮູບ 2.5 ການຄ້າຂ້າມຊາຍແດນ ຢູ່ ສປປ ລາວ ແລະ ບັນດາເສດຖະກິດທີ່ມີການສົມທຽບກັນ-ການຈັດລະດັບ ....25

ຮູບ 2.6 ການຄ້າຂ້າມຊາຍແດນ ຢູ່ ສປປ ລາວ 2020 - ເວລາ ແລະ ຄ່າໃຊ້ຈ່າຍ....25

ຮູບ 2.7 ການຈັດອັນດັບດ້ານການຊໍາລະອາກອນ ແລະ ອາກອນກໍາໄລ (ສ່ວນຮ້ອຍ) ໃນການດໍາເນີນທຸລະກິດ 2020 ...26

ຮູບ 3.1 ການເປີດຕົວຂອງການຄ້າໂດຍສະເລ່ຍ, 2013 ....33

ຮູບ 3.2 ການເປີດຕົວສະເລ່ຍຂອງການຄ້າ, 2018....34

ຮູບ 3.3 ການເປີດຕົວ ຂອງການຄ້າບໍລິການ 2018 ....34

ຮູບ 3.4 ການເປີດຕົວ ຂອງການຄ້າສິນຄ້າ: 2018 ....35

ຮູບ 3.5 ດຸນການຄ້າສິນຄ້າ ແລະ ບໍລິການ ແລະ ດຸນການຄ້າລວມ ຂອງ ສປປ ລາວ, 2009-2017 ....36

ຮູບ 3.6 ການສົ່ງອອກສິນຄ້າ ແລະ ການບໍລິການ ຕໍ່ຫົວຄົນ ຂອງ ສປປ ລາວ ໃນລາຄາປັດຈຸບັນ ....36

ຮູບ 3.7 ອັດຕາການເຕີບໂຕສະເລ່ຍຕໍ່ປີແບບທົບຕົ້ນ (CAGR) ໃນການສົ່ງອອກສິນຄ້າ, 2015-2019 ....37

ຮູບ 3.8 ອັດຕາການເຕີບໂຕສະເລ່ຍຕໍ່ປີແບບທົບຕົ້ນ (CAGR) ໃນການນຳເຂົ້າສິນຄ້າ, 2015-2019 ....37

ຮູບ 3.9 ການສົ່ງອອກ ຂອງ ສປປ ລາວ ປີ 2013 ....38

ຮູບ 3.10 ການສົ່ງອອກ ຂອງ ສປປ ລາວ ປີ 2019 ....38

ຮູບ 3.11 ການນຳເຂົ້າ ແລະ ສົ່ງອອກ ຂອງ ສປປ ລາວຕາມຂະແໜງການ 2019 ....39

ຮູບ 3.12 ດຸນຂອງການຄ້າສິນຄ້າ ຕາມຂະແໜງການ ຂອງ ສປປ ລາວ, 2019....39

ຮູບ 3.13 ທິດທາງການຄ້າ ຂອງ ສປປ ລາວ: ການນຳເຂົ້າ 2019 (ມູນຄ່າ ເປັນຫົວໜ່ວຍພັນໂດລາ) ....40

ຮູບ 3.14 ທິດທາງການຄ້າ ຂອງ ສປປ ລາວ: ການສົ່ງອອກ 2019(ມູນຄ່າເປັນຫົວໜ່ວຍພັນໂດລາ) ....40

ຮູບ 3.15 ສ່ວນແບ່ງຂອງການສູນເສຍທາງການຄ້າແບບຄາດຄະເນ ຂອງ ສປປ ລາວ ແຍກຕາມຕະຫລາດທີ່ໃຫ້ສິດທິພິເສດແກ່ບັນດາປະເທດດ້ອຍພັດທະນາ LDC ....42

ຮູບ 3.16 ການສົ່ງອອກທີ່ມີທ່າແຮງບົ່ມຊ້ອນແຍກເປັນປະເທດ ສຳລັບຜະລິດຕະພັນສິນຄ້າທີ່ ກຸ່ມປະເທດ LDC ໄດ້ຮັບສິດທິພິເສດທາງການຄ້າ ....43

ຮູບ 3.17 ອັດຕາການເຕີບໂຕການສົ່ງອອກບໍລິການຕໍ່ປີ, 2007-2020 ....44

ຮູບ 3.18 ການຈັດລະດັບເຕັກໂນໂລຊີຂໍ້ມູນຂ່າວສານຢູ່ໃນບາງປະເທດໃນອາຊີ ທີ່ໄດ້ເລືອກມາ, 2017-2020 ....46

ຮູບທີ 4.1 ຕົ້ນທຶນການຄ້າ ຂອງ ສປປ ລາວກັບບາງປະເທດ, 2018 ....56

ຮູບທີ 4.2 ແຍກໂຄງປະກອບຂອງຕົ້ນທຶນການຄ້າຂອງການຄ້າສິນຄ້າ ແລະ ການຄ້າບໍລິການ ....57

ຮູບທີ 4.3 ໂຄງປະກອບອັດຕາພາສີ MFN ຂອງ ສປປ ລາວ ....59

ຮູບທີ 4.4 ຈຳນວນລາຍການສິນຄ້າຕາມລະຫັດພາສີຍ່ອຍ ແບ່ງຕາມຂະແໜງ ແລະ ອັດຕາພາສີ MFN ສະເລ່ຍຄາດຄະເນລ່ວງໜ້າ ....60

ຮູບທີ 4.5 ອັດຕາພາສີ MFN ຄາດຄະເນລ່ວງໜ້າ ຂອງ ສປປ ລາວ ໃນການນຳເຂົ້າ ແລະ ການສົ່ງອອກ, 2019 ....60

ຮູບທີ 4.6 ອົງປະກອບຂອງພື້ນຖານໂຄງລ່າງ ດ້ານຄຸນນະພາບແຫ່ງຊາດ ........................................................65

ຮູບທີ 5.1 ດັດຊະນີຊີ້ວັດປະສິດທິພາບທາງດ້ານໂລຊິດສະຕິກ , ສປປ ລາວ ແລະ ບາງປະເທດທີ່ເລືອກເຟັ້ນມາ 2010-2018 ..................................................................................................................................68

ຮູບທີ 5.2 ປະສິດທິພາບທາງດ້ານໂລຊິດສະຕິກ ຕາມດັດຊະນີຊີ້ວັດດັ່ງກ່າວ, ລຳດັບທີຂອງຕົວຊີ້ວັດ, 2018 .............69

ຮູບທີ 5.3 ການດຳເນີນທຸລະກິດ, ບັນດາຕົວຊີ້ວັດ ຂອງການຄ້າລະຫວ່າງຊາຍແດນ, ສປປ ລາວ 2016-2020 ..........70

ຮູບທີ 6.1 ຄ່າຈັດສົ່ງຕູ້ຄອນເຕັນເນີ 40 ຟຸດ ຈາກທ່າເຮືອ ໂຢໂກຮາມາ, ຍີ່ປຸ່ນ ....................................................83

ຮູບທີ 6.2 ການຜະລິດເຂົ້າທັງໝົດໃນ ສປປ ລາວ: 2009-18 ........................................................................87

ຮູບທີ 6.3 ການປຽບທຽບຜະລິດຕະພາບຕາມແຕ່ລະປະເພດຂອງການຜະລິດເຂົ້າ ຢູ່ສປປລາວ: 2009-18 ...............88

ຮູບທີ 6.4 ການຜະລິດກາເຟໃນ ສປປ ລາວ: 2009-2018 ..............................................................................95

ຮູບທີ 6.5 ການສົ່ງອອກກາເຟດິບ ຂອງ ສປປ ລາວ ແລະ ລາຄາ: 2008-18.......................................................97

ຮູບທີ 6.6 ໂຄງປະກອບການສົ່ງອອກທີ່ປ່ຽນແປງຂອງກາເຟລາວ: 2003-2019 ...................................................98

ຮູບທີ 6.7 ຄວາຍ, ງົວ, ແບ້ ແລະ ໝູ ໃນ ສປປ ລາວ: 2009-18 ......................................................................101

ຮູບທີ 6.8 ສັດປີກ ຂອງ ສປປ ລາວ ແຍກຕາມພາກ: 2009-18 ......................................................................101

ຮູບທີ 6.9 ການກະຈາຍໄປຕາມພາກຂອງການຜະລິດສາລີໃນ ສປປ ລາວ: 2009-18 ........................................104

ຮູບທີ 6.10 ລາຄາສາລີທີ່ຊື້ຂາຍປະຈຳວັນຂອງສາກົນ: ວັນທີ 3 ມັງກອນ 2005 - 16 ພະຈິກ 2020 ...................105

ຮູບທີ 6.11 ເນື້ອທີ່ເກັບກູ້ ແລະ ສະມັດຖະພາບການຜະລິດສາລີ ຂອງ ສປປ ລາວ: 2009-18 .............................106

ຮູບທີ 6.12 ລາຄາສົ່ງອອກ ຕໍ່ກັບ ລາຄານຳເຂົ້າສາລີ ຂອງ ສປປ ລາວ...........................................................107

ຮູບທີ 6.13 ການຜະລິດພືດໃຫ້ນ້ຳມັນໃນ ສປປ ລາວ: 2009-18 .................................................................108

ຮູບທີ 6.14 ການຜະລິດພືດໃຫ້ນ້ຳມັນແຍກຕາມປະເພດ: 2009-18 ..............................................................108

ຮູບທີ 6.15 ລາຄາຂອງສາກົນຂອງຖົ່ວດິນ ແລະ ຖົ່ວເຫລືອງ & ນ້ຳມັນພືດ 2009-2020 ...................................109

ຮູບທີ 6.16 ສະມັດຖະພາບການຜະລິດຂອງພືດໃຫ້ນ້ຳມັນ: 2009-18 ..........................................................110

ຮູບທີ 7.1 ບັນດາຕະຫລາດການທ່ອງທ່ຽວທີ່ສຳຄັນ ແຍກຕາມປະເທດຕົ້ນທາງ ໃນປີ 2013 ແລະ 2019 ...............113

ຮູບທີ 7.2 ນັກທ່ອງທ່ຽວຈາກຈີນ, 2013-2019 ........................................................................................114

ຮູບທີ 7.3 ຄ່າໃຊ້ຈ່າຍສະເລ່ຍຕໍ່ນັກທ່ອງທ່ຽວ, 2019 .................................................................................114

ຮູບທີ 7.4 ບັນດາປະເທດຕົ້ນທາງໃຫຍ່ສຸດ ແຍກຕາມຄ່າໃຊ້ຈ່າຍຂອງນັກທ່ອງທ່ຽວ 2019 ................................115

ຮູບທີ 8.1 ຈຳນວນວິສາຫະກິດຢູ່ໃນເຂດເສດຖະກິດພິເສດ ປີ 2019 .........................................................134

# ສາລະບານກ່ອງເນື້ອຄວາມ


ກ່ອງເນື້ອຄວາມທີ 1.1: ກອງທຶນສົມທົບຫລາຍຝ່າຍ (MDTF): 2008 - 2022 ....................7
ກ່ອງເນື້ອຄວາມທີ 1.2 ພາລະບົດບາດ ຂອງຄະນະຊີ້ນຳແຜນງານຈັດຕັ້ງປະຕິບັດໂຄງການ (PEC) ....................8
ກ່ອງເນື້ອຄວາມ ທີ 5.2 ລານຕູ້ສິນຄ້າ ຂອງ ສປປ ລາວ ....................71
ກ່ອງເນື້ອຄວາມ 6.1 ເຄື່ອງມືນະໂຍບາຍເພື່ອເພີ່ມການລົງທຶນ ແລະ ປະສິດທິພາບໃນ ຕ່ອງໂສ້ມູນຄ່າເຂົ້າ. ....................91
ກ່ອງເນື້ອຄວາມ 6.2 ຜູ້ປູກກາເຟຊະນິດພິເສດ ....................97
ກ່ອງເນື້ອຄວາມ 7.1 ຂໍ້ສະເໜີແນະດ້ານຄວາມສາມາດແຂ່ງຂັນ ສຳລັບຂະແໜງທ່ອງທ່ຽວ ໃນບົດ DTIS 2012 ....................111
ກ່ອງເນື້ອຄວາມ 7.2 ປະເພດນັກທ່ອງທ່ຽວສາກົນ ....................117
ກ່ອງເນື້ອຄວາມ 7.3 ຂະບວນການລົງທຶນ ແລະ ການອອກອະນຸຍາດ ....................119
ກ່ອງເນື້ອຄວາມ 7.4 ຜູ້ນຳທ່ຽວ (ໄກດ໌ນຳທ່ຽວ) ....................120
ກ່ອງເນື້ອຄວາມ 7.5 ບົດບາດຍິງ-ຊາຍ ກັບຂະແໜງການທ່ອງທ່ຽວ ....................121
ກ່ອງເນື້ອຄວາມ 7.6 ຜົນກະທົບ ຂອງບັນດາໂຄງການດ້ານການທ່ອງທ່ຽວ....................122
ກ່ອງເນື້ອຄວາມ 8.1 ຂໍ້ສະເໜີແນະຈາກການປະເມີນ ....................133
ກ່ອງເນື້ອຄວາມ 8.2 ສິ່ງທ້າທາຍ ຂອງເຂດເສດຖະກິດພິເສດ ຂອງ ສປປ ລາວ ....................135
ກ່ອງເນື້ອຄວາມ 8.3 ບັນດາຂະແໜງການບຸລິມີສິດ ຂອງ SEZ....................135

# ບົດສະແດງຄວາມຮູ້ບຸນຄຸນ

ກົມແຜນການ ແລະ ການຮ່ວມມື ຂອງກະຊວງອຸດສາຫະກຳ ແລະ ການຄ້າ ໄດ້ມອບໃຫ້ພະແນກຄຸ້ມຄອງການຈັດຕັ້ງປະຕິບັດໂຄງການຊ່ວຍເຫລືອຂອງຕ່າງປະເທດ NIU ເພື່ອໃຫ້ປັບບົດວິໄຈການເຊື່ອມໂຍງເຂົ້າສາກົນດ້ານການຄ້າ DTIS ປີ 2012 ໃຫ້ເປັນສະບັບປັດຈຸບັນໂດຍການໄດ້ຮັບການຊ່ວຍເຫລືອຈາກກອງທຶນຮ່ວມສົມທົບທຶນ ຂອງຫລາຍຝ່າຍ ແລະ ຈາກໂຄງການເຄືອຂ່າຍການເຊື່ອມໂຍງເຂົ້າສາກົນດ້ານການຄ້າ (EIF). EIF ໄດ້ນຳເອົາຄູ່ຮ່ວມງານແລະຊັບພະຍາກອນຕ່າງໆມາຮ່ວມກັນເພື່ອສະໜັບສະໜູນບັນດາປະເທດດ້ອຍພັດທະນາໃຫ້ນຳໃຊ້ການຄ້າເພື່ອການຫຼຸດຜ່ອນຄວາມທຸກຍາກ, ການເຕີບໂຕແບບທົ່ວເຖິງ, ການພັດທະນາແບບຍືນຍົງ ແລະ ສາມາດຟື້ນຄືນສະພາບເດີມໄດ້ຢ່າງໄວວາ ແລະ ໄດ້ຮັບການສະໜັບສະໜູນຈາກຜູ້ໃຫ້ທຶນ ຂອງໂຄງການ EIF ຊຶ່ງມີຫລາຍຝ່າຍຮ່ວມປະກອບທຶນ. ສະມາຊິກຫຼັກຂອງທີມງານແມ່ນ Robert Kirk (ຫົວໜ້າທີ່ປຶກສາສາກົນ), Mana Southichack (ກະສິກຳແລະທຸລະກິດກະສິກຳ ແລະການປະຕິບັດແຜນດຳເນີນງານຂະແໜງການຄ້າ ແລະພາກເອກະຊົນ 2013), ແລະ Françoіs Guillot (ການທ່ອງທ່ຽວ). ທີມງານຍັງໄດ້ຮັບຜົນປະໂຫຍດອັນໃຫຍ່ຫຼວງຈາກການປ້ອນຂໍ້ມູນ ແລະ ຄຳແນະນຳຈາກ ທ່ານ ແສງໄຊ ພູຊົງຮວາ (ຊ່ຽວຊານດ້ານການພັດທະນາ ທຸລະກິດພາກເອກະຊົນ).

ທີມງານຜູ້ຂຽນບົດລາຍງານຂໍສະແດງການຕີລາຄາສູງຕໍ່ທ່ານລັດຖະມົນຕີ ປອ. ຄຳແພງ ໄຊສົມແພງ ທີ່ໄດ້ມີການນຳພາ ແລະ ໃຫ້ທິດຊີ້ນຳ. ທີມງານກໍ່ຂໍຂອບໃຈ ຄະນະປັບປຸງບົດ DTIS ທີ່ນຳໂດຍ ທ່ານຮອງລັດຖະມົນຕີ ປອ. ມະໂນທອງ ວົງໄຊ, ແລະ ປະກອບດ້ວຍ ທ່ານ ປອ. ຄຳເພັດ ວົງດາລາ (ຫົວໜ້າກົມ), ແສງພະນົມຈອນ ອິນທິສານ (ຮອງກົມ), ນາງ ລັດຕະນະພອນ ວົງສຸທີ (ຫົວໜ້າພະແນກ), ນິດນິດາ ພົງສະຫວັດ (ວິຊາການ), ນາງ ສອນວິໄລ ແພງຕາວັນ (ວິຊາການ). NIU ໄດ້ໃຫ້ຄຳຄິດເຫັນທີ່ເປັນປະໂຫຍດກ່ຽວກັບແນວຄວາມຄິດ ແລະ ບັນດາບົດທີ່ໄດ້ຮ່າງເບື້ອງຕົ້ນ, ຊ່ວຍທີມງານໃນການຄັດເລືອກທີ່ປຶກສາທີ່ເປັນຄົນລາວ ແລະຈັດຕັ້ງການເປີດຕົວການນຳສະເໜີເພື່ອກ້າວສູ່ການຮັບຮອງຄວາມຖືກຕ້ອງຂອງບົດ. ສະແດງຄວາມຮູ້ບຸນຄຸນຕໍ່ທ່ານນາງ ຮັງ ເຈິນ ທີ່ ກອງເລຂາ EIF ທີ່ໄດ້ມີຄຳເຫັນແລະການໃຫ້ທິດ. ຜູ້ຂຽນຍັງຮູ້ສຶກຮູ້ບຸນຄຸນສຳລັບຂໍ້ມູນແລະຄຳຄິດຄຳເຫັນຈາກທ່ານ Melise Jaud (ນັກເສດຖະສາດອາວຸໂສ, ທະນາຄານໂລກ), ຄອນສະຫວາງ ຫງາດໄຊຊົນ (ນັກເສດຖະສາດ, ທະນາຄານໂລກ), Anne-Katrin Pfister, Mel Spence, Shahid Meezan, Mombert Hoppe, Lisa Mortimer, Bryan Fornari ແລະ Nick Freeman,

ໃນການວິເຄາະບົດລາຍງານນີ້, ທີມງານຜູ້ຂຽນໄດ້ຮັບປະໂຫຍດອັນໃຫຍ່ຫຼວງ ຈາກໂອກາດທີ່ໄດ້ນຳສະເໜີບັນທຶກແນວຄວາມຄິດແລະຜົນການຄົ້ນພົບເບື້ອງຕົ້ນຕໍ່ສະມາຊິກຂອງໜ່ວຍງານຂະແໜງການຄ້າແລະພາກເອກະຊົນ TPSWG ໃນກອງປະຊຸມຂອງພວກເພິ່ນໃນຄັ້ງວັນທີ 4 ກຸມພາ 2021 ແລະວັນທີ 10 ພະຈິກ 2021. ສະມາຊິກຂອງ TP-SWG ໄດ້ໃຫ້ຄວາມເຫັນໃນທາງເລິກທີ່ເປັນປະໂຫຍດ ເຊິ່ງໄດ້ຊ່ວຍໃຫ້ແກ່ການຂຽນບົດລາຍງານໃຫ້ສຳເລັດ.

# ສາລະບານຄຳຫຍໍ້

| | |
|---|---|
| A4T | ການຊ່ວຍເຫລືອດ້ານການຄ້າ |
| ADB | ທະນາຄານພັດທະນາອາຊີ |
| AEO | ຜູ້ປະກອບການມາດຕະຖານເອອີໂອ(ຜູ້ປະກອບການດີເດັ່ນໃນການປະຕິບັດກົດໝາຍວ່າດ້ວຍພາສີ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ) |
| AM | ບົດບັນທຶກຊ່ວຍຈຳ |
| BOL | ທະນາຄານແຫ່ງ ສປປລາວ |
| COVID-19 | ພະຍາດອັກເສບປອດຢ່າງຮຸນແຮງ/ໂຄວິດ 2019 |
| CTP | ໂຄງການສົ່ງເສີມຄວາມສາມາດແຂ່ງຂັນ ແລະ ການຄ້າ |
| DERM | ກົມທະບຽນແລະຄຸ້ມຄອງວິສາຫະກິດ |
| DFAT | ກະຊວງການຕ່າງປະເທດ ແລະ ການຄ້າ, ອົດສະຕຣາລີ |
| DIH | ກົມອຸດສາຫະກຳ ແລະ ຫັດຖະກຳ |
| DIMEX | ກົມການນຳເຂົ້າ ແລະ ສົ່ງອອກ |
| DFTP | ກົມນະໂຍບາຍການຄ້າຕ່າງປະເທດ |
| DOA | ກົມປູກຝັງ |
| DOLF | ກົມລ້ຽງສັດ ແລະ ການປະມົງ |
| DOSM | ກົມມາດຕະຖານ ແລະ ການວັດແທກ |
| DPC | ກົມແຜນການ ແລະ ການຮ່ວມມື |
| DTIS | ບົດວິໄຈການເຊື່ອມໂຍງເຂົ້າສາກົນດ້ານການຄ້າ |
| EIF | ໂຄງການເຄືອຂ່າຍການເຊື່ອມໂຍງເຂົ້າສາກົນດ້ານການຄ້າ |
| FDD | ກົມອາຫານ ແລະ ຢາ |
| FDI | ການລົງທຶນໂດຍກົງຂອງຕ່າງປະເທດ |
| FY | ປີການເງິນ |
| GIZ | ອົງການຮ່ວມມືສາກົນຂອງເຢຍລະມັນ |
| GOL | ລັດຖະບານແຫ່ງ ສປປ ລາວ |
| HACCP | ການວິເຄາະອັນຕະລາຍ ແລະ ຈຸດຄວບຄຸມວິກິດ |
| IA | ໜ່ວຍງານ/ອົງກອນຈັດຕັ້ງປະຕິບັດ |
| ICSID | ສູນສາກົນເພື່ອການແກ້ໄຂຂໍ້ຂັດແຍ່ງດ້ານການລົງທຶນ |
| IPD | ກົມສົ່ງເສີມການລົງທຶນ |
| IMF | ອົງການກອງທຶນສາກົນ |
| JRMF | ຂອບການຮ່ວມຄຸ້ມຄອງຄວາມສ່ຽງ ແບບເປັນເອກະພົບອັນດຽວ/ແບບປະສົມປະສານເຊື່ອມໂຍງກັນ |
| JIRM | ທີມງານຮ່ວມເພື່ອຄຸ້ມຄອງ ຄວາມສ່ຽງລະຫວ່າງອົງການ |
| LBF | ກອງປະຊຸມທຸລະກິດລາວ |
| LCCI | ສະພາການຄ້າ ແລະ ອຸດສາຫະກຳລາວ |
| LCD | ກົມພາສີ ຂອງລາວ |
| LCTP | ໂຄງການສົ່ງເສີມຄວາມສາມາດໃນການແຂ່ງຂັນ ແລະ ການຄ້າ ຂອງ ສປປ ລາວ |
| LDC | ປະເທດດ້ອຍພັດທະນາ |
| LIFFA | ສະມາຄົມຜູ້ຈັດສົ່ງສິນຄ້າລະຫວ່າງປະເທດ ຂອງສປປ ລາວ |
| LNCCI | ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ |
| LNSW | ລະບົບແຈ້ງພາສີປະຕູດຽວແຫ່ງຊາດ |
| MFN | ຫຼັກການປະຕິບັດແບບຊາດໄດ້ຮັບອະນຸເຄາະຍິ່ງ (ໃຊ້ກັບພາສີທີ່ເກັບຕາມເງື່ອນໄຂຂອງກຸ່ມປະເທດ ສະມາຊິກ WTO) |
| MOAF | ກະຊວງກະສິກຳ ແລະ ປ່າໄມ້ |
| MOICT | ກະຊວງຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ |
| MOIC | ກະຊວງອຸດສາຫະກຳ ແລະ ການຄ້າ |
| MOF | ກະຊວງການເງິນ |
| MOH | ກະຊວງສາທາລະນະສຸກ |
| MOHA | ກະຊວງພາຍໃນ |
| MOST | ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ |
| MPI | ກະຊວງແຜນການ ແລະ ການລົງທຶນ |
| NIU | ພະແນກຄຸ້ມຄອງການຈັດຕັ້ງປະຕິບັດໂຄງການຊ່ວຍເຫລືອຂອງຕ່າງປະເທດ |
| NSEDP | ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ |

| | |
|---|---|
| NTB | ສິ່ງກີດກັນການຄ້າທີ່ບໍ່ແມ່ນພາສີ |
| NTFC | ຄະນະກຳມະການແຫ່ງຊາດເພື່ອອຳນວຍຄວາມສະດວກທາງດ້ານການຄ້າ |
| NTFS | ກອງເລຂາອຳນວຍຄວາມສະດວກທາງດ້ານການຄ້າ |
| OGA | ສຳນັກງານອົງການອື່ນ ຂອງລັດຖະບານ |
| OL | ໃບອະນຸຍາດດຳເນີນກິດຈະການ(ທຸລະກິດ) |
| PCA | ການກວດສອບຄວາມຖືກຕ້ອງຫລັງການປ່ອຍສິນຄ້າ |
| RCEP | ສັນຍາການຮ່ວມມືເສດຖະກິດແບບຮອບດ້ານລະດັບພາກພື້ນ |
| SME | ວິສາຫະກິດຂະໜາດນ້ອຍ ແລະ ກາງ |
| SPS | ມາດຕະການສຸຂະອະນາໄມ ແລະ ສຸຂະອະນາໄມພືດ |
| SSCBT | ຊາວຄ້າຂາຍຊາຍແດນຂະໜາດນ້ອຍ |
| TBT | ສິ່ງກີດຂວາງດ້ານເຕັກນິກຕໍ່ການຄ້າ |
| TFA | ສັນຍາວ່າດ້ວຍການອຳນວຍຄວາມສະດວກທາງດ້ານການຄ້າ |
| TPSWG | ໜ່ວຍງານຂະແໜງການຄ້າ ແລະ ພາກເອກະຊົນ |
| TRS | ການສຶກສາເວລາການກວດປ່ອຍສິນຄ້າ |
| VCAFD | ຂະແໜງກະສິກຳ ແລະ ປ່າໄມ້ ນະຄອນຫລວງວຽງຈັນ |
| VCLFD | ຂະແໜງການລ້ຽງສັດ ແລະ ການປະມົງ ນະຄອນຫລວງວຽງຈັນ |
| WB | ທະນາຄານໂລກ |
| WCO | ອົງການພາສີໂລກ |
| WDR | ບົດລາຍງານການພັດທະນາຂອງໂລກ |
| WTO | ອົງການຈຸຄ້າໂລກ |

# ຄຳນຳ



ຂ້າພະເຈົ້າມີຄວາມຍິນດີທີ່ຈະເປີດຕົວ ບົດ DTIS ສະບັບປັບປຸງ ປີ 2022 ຂອງ ສປປ ລາວ ແລະ ແຜນດຳເນີນງານການພັດທະນາຂະແໜງການຄ້າ ແລະ ພາກເອກະຊົນສະບັບປັບປຸງ. ບົດລາຍງານດັ່ງກ່າວໄດ້ຮັບຮູ້ເຖິງຄວາມມຸ່ງໝັ້ນຂອງ ສປປ ລາວ ເພື່ອຈະຮັບປະກັນໃຫ້ມີສະພາບແວດລ້ອມການລົງທຶນ ແລະ ການຄ້າທີ່ເອື້ອອຳນວຍໃຫ້ແກ່ການສ້າງໃຫ້ມີວຽກເຮັດງານທຳໃຫ້ຫລາຍ ແລະ ດີຂຶ້ນ ແກ່ກຳລັງແຮງງານທີ່ເພີ່ມຂຶ້ນ ແລະ ໃຫ້ມີການສ້າງເສດຖະກິດທີ່ມີຄວາມສາມາດປັບຕົວຄືນສູ່ສະພາບເດີມເມື່ອຖືກກະທົບ ແລະ ມີຄວາມຫຼາກຫຼາຍຕາມຍຸດທະສາດແຫ່ງຊາດກ່ຽວກັບການພັດທະ ນາເສດຖະກິດ-ສັງຄົມ 2025 ແລະ ວິໄສທັດ 2030. ແຜນດຳເນີນງານທີ່ໄດ້ຮັບການປັບປຸງແມ່ນສະແດງໃຫ້ເຫັນບັນດາກິດຈະກຳການເຄື່ອນໄຫວທີ່ເປັນບຸລິມະສິດທີ່ຈຳເປັນເພື່ອເຮັດໃຫ້ບັນລຸເປົ້າໝາຍທີ່ກ່ຽວຂ້ອງກັບການລົງທຶນ ແລະ ການຄ້າໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດຄັ້ງທີ IX (2021-25).

ຂ້າພະເຈົ້າຂໍຂອບໃຈບັນດາທ່ານສະມາຊິກ ຂອງໜ່ວຍງານຂະແໜງການໆຄ້າ ແລະ ພາກເອກະຊົນ, ລວມທັງຄູ່ຮ່ວມພັດທະນາ ຂອງພວກເຮົາ, ພາກເອກະຊົນ ແລະ ບັນດາກະຊວງອົງການ ຂອງລັດ. ໜ່ວຍງານນີ້ຢູ່ພາຍໃຕ້ການຄວບຄຸມດູແລ ຈາກການນຳຂັ້ນຮອງລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ (MOIC) ພ້ອມດ້ວຍບັນດາປະທານຮ່ວມຈາກຄູ່ຮ່ວມພັດທະນາ. ນອກນັ້ນ, ທີມງານວິຊາການ ຂອງ DTIS, ເຊິ່ງປະກອບດ້ວຍຕົວແທນຈາກບັນດາກົມຕົ້ນຕໍ ແລະ ຕົວແທນ ຂອງຄູ່ຮ່ວມພັດທະນາ, ໄດ້ເປັນຜູ້ໃຫ້ການວາງແຜນ ແລະ ການທົບທວນຄືນທີ່ກຳລັງດຳເນີນຢູ່ ຂອງບົດລາຍງານສະບັບນີ້. ຂ້າພະເຈົ້າຂໍສະແດງຄວາມຊົມເຊີຍມາຍັງກົມແຜນການ ແລະ ການຮ່ວມມື ຂອງກະຊວງອຸດສາຫະກຳ ແລະ ການຄ້າ, ພ້ອມທັງພະແນກຄຸ້ມຄອງການຈັດຕັ້ງປະຕິບັດໂຄງການຊ່ວຍເຫລືອຂອງຕ່າງປະເທດ ຂອງກົມ ແລະ ທີມງານຊ່ຽວຊານທີ່ປຶກສາທີ່ໄດ້ເຂົ້າຮ່ວມເຮັດວຽກໃນຄັ້ງນີ້, ເຊິ່ງໄດ້ມີຜົນງານທີ່ມີຄຸນນະພາບໃນວຽກງານການຄົ້ນຄວ້າວິໄຈໃນຄັ້ງນີ້ ແລະ ໄດ້ມີຂໍ້ສະເໜີແນະດ້ານພຶດຕິກຳທີ່ໄດ້ມາຈາກການປຶກສາຫາລືຢ່າງກວ້າງຂວາງກັບພາກສ່ວນກ່ຽວຂ້ອງຕ່າງໆທີ່ມີສ່ວນໄດ້ສ່ວນເສຍໃນວຽກງານດັ່ງກ່າວ. ກິດຈະກຳການເຄື່ອນໄຫວບຸລິມະສິດ ຂອງແຜນດຳເນີນງານສະບັບປັບປຸງນີ້ ສ່ອງແສງໃຫ້ເຫັນເຖິງວິໄສທັດທີ່ໄດ້ກຳນົດໄວ້ໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ IX ເພື່ອນຳປະເທດໄປສູ່ການເປັນເສດຖະກິດທີ່ທັນສະໄໝ ແລະ ມີຄວາມຫລາກຫລາຍ, ທັງເປັນການກະກຽມ ແລະ ຕອບສະໜອງກັບຄວາມຮຽກຮ້ອງຕ້ອງການທີ່ກ່ຽວຂ້ອງກັບການຄ້າ ເພື່ອເຮັດໃຫ້ປະເທດຫລຸດພົ້ນຈາກສະຖານະພາບປະເທດດ້ອຍພັດທະນາ.

ໂດຍອີງໃສ່ເນື້ອໃນຈິດໃຈຂອງການຮ່ວມມື ແລະ ຖະແຫຼງການວຽງຈັນກ່ຽວກັບປະສິດທິຜົນ ຂອງການຊ່ວຍເຫຼືອ, ພວກເຮົາຍັງຕີລາຄາສູງຕໍ່ຄວາມຄິດຄວາມເຫັນ ຂອງຜູ້ຊ່ຽວຊານ ແລະ ຕໍ່ການສະໜັບສະໜູນ ຂອງຄູ່ຮ່ວມພັດທະນາທີ່ສຳຄັນ ຂອງພວກເຮົາ ແລະ ເຂົ້າໃຈວ່າພວກເຮົາຈະສາມາດຮ່ວມກັນຮັບປະກັນໃຫ້ແຜນດຳເນີນງານສະບັບປັບປຸງນີ້ ໄດ້ຮັບການຈັດຕັ້ງປະຕິບັດຢ່າງມີປະສິດທິຜົນ. ໂຄງການເຄືອຂ່າຍການເຊື່ອມໂຍງເຂົ້າສາກົນດ້ານການຄ້າ EIF, ເຊິ່ງຕັ້ງຢູ່ໃນອົງການການຄ້າໂລກ, ໄດ້ມີບົດບາດຕົ້ນຕໍໃນການເຊື່ອມສານວຽກງານການຄ້າ ແລະ ການຊ່ວຍເຫລືອດ້ານການຄ້າເຂົ້າໃນກະແສຫລັກຂອງການພັດທະນາ. ຂ້າພະເຈົ້າຂໍຂອບໃຈ EIF ທີ່ໄດ້ໃຫ້ການສະໜັບສະໜູນ ແລະ ການສະໜອງທຶນໃຫ້ແກ່ ສປປ ລາວ ເພື່ອຄຸ້ມຄອງ ແລະ ຈັດຕັ້ງປະຕິບັດຂະບວນການນີ້.

ຂ້າພະເຈົ້າຂໍຮຽກຮ້ອງມາຍັງບັນດາກົມກອງທີ່ກ່ຽວຂ້ອງທັງໝົດ ທັງຢູ່ພາຍໃນກະຊວງອຸດສາ ຫະກຳ ແລະ ການຄ້າ ແລະ ຢູ່ບັນດາກະຊວງ, ອົງການອື່ນໆ, ພາກເອກະຊົນ, ເຊິ່ງລ້ວນແຕ່ມີຄວາມສຳຄັນເປັນຢ່າງຍິ່ງໃນການພັດທະນາການຄ້າ, ຈົ່ງພະຍາຍາມຢ່າງຕັ້ງໜ້າໃນການຈັດຕັ້ງປະຕິບັດບັນດາກິດຈະກຳການເຄື່ອນໄຫວບຸລິມະສິດເພື່ອເຮັດໃຫ້ ສປປ ລາວ ບັນລຸໄດ້ຜົນສຳເລັດ.



ພະນະທ່ານ ປອ ຄຳແພງ ໄຊສົມແພງ

ລັດຖະມົນຕີກະຊວງອຸດສາຫະກຳແລະການຄ້າ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

# ບົດສະຫລຸບຫຍໍ້

ບົດວິໄຈການເຊື່ອມໂຍງເຂົ້າສາກົນດ້ານການຄ້າ DTIS ຂອງ ສປປ ລາວ ປີ 2022 ໄດ້ຈຳແນກໃຫ້ເຫັນກິດຈະກຳທີ່ເປັນບຸລິມະສິດເພື່ອສະໜັບສະໜູນຍຸດທະສາດ ຂອງປະເທດໃນການຫັນໄປສູ່ຄວາມຫລາກຫລາຍທາງຂະແໜງເສດຖະກິດ, ການຟື້ນຟູຄືນຈາກການລະບາດຂອງພະຍາດໂກວິດ-19 ແລະ ການຈະຫລຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ LDC ກ່ອນປີ 2026 ໂດຍຜ່ານການເລັ່ງລັດການເຊື່ອມໂຍງການຄ້າ. ການສຶກສາຄົ້ນຄວ້ານີ້ຈຸດປະສົງເພື່ອ (ກ) ພິຈາລະນາຄວາມຄືບໜ້າໃນການຈັດຕັ້ງປະຕິບັດແຜນດຳເນີນງານຂະແໜງການຄ້າ ແລະ ພາກທຸລະກິດເອກະຊົນທີ່ໄດ້ຮັບຮອງເອົາໃນບົດ DTIS 2012, (ຂ) ນຳສະເໜີສິ່ງທີ່ເປັນຈຸດສຸມໃນລວງເລິກກ່ຽວກັບທຸລະກິດກະສິກຳ, ການທ່ອງທ່ຽວ ແລະອຸດສາຫະກຳປຸງແຕ່ງ ແລະ (ຄ) ກະກຽມແຜນດຳເນີນງານຂະແໜງ ການຄ້າ ແລະ ພາກທຸລະກິດເອກະຊົນ ສະບັບປັບປຸງ. ໃນຂະນະທີ່ບົດລາຍງານໄດ້ສຸມໃສ່ທຸລະກິດກະສິກຳ, ການທ່ອງທ່ຽວ ແລະ ອຸດສາຫະກຳປຸງແຕ່ງ, ບົດໄດ້ເວົ້າເຖິງສະພາບແວດລ້ອມທີ່ເອື້ອອຳນວຍໃຫ້ແກ່ທຸລະກິດ, ຕົ້ນທຶນທາງການຄ້າ, ການຄ້າຂະໜາດນ້ອຍແລະບົດບາດຍິງ-ຊາຍ. ບົດລາຍງານໄດ້ຈຳແນກໃຫ້ເຫັນບັນຊີລາຍຊື່ບຸລິມະສິດຂອງມາດຕະການທີ່ຈະສະໜັບສະໜູນ ສປປ ລາວ ໃຫ້ບັນລຸການເຕີບໂຕທີ່ມີລັກສະນະທົ່ວເຖິງ, ມີຄວາມຫຼາກຫຼາຍ ແລະ ສາມາດຟື້ນຕົວໄດ້ ກວ່າ.

## 1. ຮຽກຮ້ອງໃຫ້ມີການປະຕິຮູບດ້ານທຸລະກິດ ແລະ ການຄ້າຕື່ມອີກ ເພື່ອໃຫ້ເກີດຄວາມທົ່ວເຖິງ, ຄວາມຫຼາກຫຼາຍ, ການສ້າງວຽກເຮັດງານທຳໃຫ້ກວ້າງຂວາງ ແລະການຫຼຸດຜ່ອນຄວາມທຸກຍາກ.

### ກ. ການເຕີບໂຕຢ່າງວ່ອງໄວໃນທົດສະວັດທີ່ຜ່ານມາຕົ້ນຕໍແມ່ນຍ້ອນການລົງທຶນດ້ານພື້ນຖານໂຄງລ່າງ ແລະ ການຂຸດຄົ້ນຊັບພະຍາ ກອນທຳມະຊາດ, ເຊິ່ງມີການສ້າງວຽກເຮັດງານທຳທີ່ຈຳກັດ.

ໃນໄລຍະປີ 2000-2019 ອັດຕາການເຕີບໂຕ ຂອງ ສປປ ລາວ ສະເລ່ຍ 7,2 ເປີເຊັນຕໍ່ປີ. ປັດໄຈຂັບເຄື່ອນຕົ້ນຕໍ ແມ່ນການລົງທຶນດ້ານພື້ນຖານໂຄງລ່າງ ດ້ວຍແຫລ່ງທຶນກູ້ຢືມຈາກຕ່າງປະເທດ ແລະ ການຂຸດຄົ້ນຊັບພະຍາກອນທຳມະຊາດໂດຍການລົງທຶນໂດຍກົງຈາກຕ່າງປະເທດ. ໃນປີ 2019, GDP ເພີ່ມຂຶ້ນດ້ວຍອັດຕາ 5,5 ເປີເຊັນ ແລະຈາກນັ້ນຫຼຸດລົງເປັນ 0,4 ເປີເຊັນ ໃນການຂາລົງທາງເສດຖະກິດ ປີ 2020 ທີ່ຕິດພັນກັບ COVID-19. ກ່ອນເກີດການລະບາດ ຂອງພະຍາດໂຄວິດ-19, ລະບົບເສດຖະກິດມະຫາພາກຂອງ ສປປ ລາວ ແມ່ນຂາດຄວາມຍືນຍົງ ໂດຍມີລະດັບໜີ້ສິນຫຼາຍ, ຄັງສຳຮອງເງິນຕາຕ່າງປະເທດຫຼຸດລົງ ແລະ ລະບົບການເງິນທີ່ບໍ່ເຂັ້ມແຂງ. ບຸລິມະສິດສຳຄັນທີ່ຮີບດ່ວນລວມມີການຟື້ນຟູຄວາມໝັ້ນທ່ຽງຂອງເສດຖະກິດມະຫາພາກ ແລະ ການສະກັດກັ້ນການລະບາດຂອງພະຍາດໂຄວິດ-19. ທະນາຄານໂລກໄດ້ກຳນົດສາມຂົງເຂດເພື່ອຟື້ນຟູສະຖຽນລະພາບຂອງເສດຖະກິດມະຫາພາກ. ໃນນັ້ນແມ່ນການເພີ່ມທະວີການຄຸ້ມຄອງໜີ້ສິນ ແລະ ຄວາມໂປ່ງໃສ, ເພີ່ມທະວີຄວາມໝັ້ນຄົງຂອງຂະແໜງການເງິນ ໂດຍຜ່ານການປັບປຸງລະບຽບການ ແລະ ການປັບໂຄງສ້າງທະນາຄານຄືນໃໝ່ ແລະ ເພີ່ມທະວີຄວາມຍືນຍົງດ້ານງົບປະມານ ໂດຍຜ່ານການລະດົມລາຍຮັບພາຍໃນປະເທດໃຫ້ຫຼາຍຂຶ້ນ ແລະ ການຄຸ້ມຄອງລາຍຈ່າຍໃຫ້ມີປະສິດທິພາບກວ່າເກົ່າ.

ການເອື່ອຍອີງການຂຸດຄົ້ນຊັບພະຍາກອນທຳມະຊາດຈາກການຂຸດຄົ້ນບໍ່ແຮ່ ແລະ ການລົງທຶນດ້ານພື້ນຖານໂຄງລ່າງ, ເຊິ່ງມີການໃຊ້ທຶນຮອນສູງ, ໄດ້ຊຸກຍູ້ອັດຕາການເຕີບໂຕໃນໄລຍະສອງທົດສະວັດທີ່ຜ່ານມາ. ແນວໃດກໍດີ, ສິ່ງດັ່ງກາວໄດ້ເຮັດໃຫ້ມີການສ້າງວຽກເຮັດງານທຳໃນລະດັບພໍປະມານ ແລະ ການຫຼຸດຜ່ອນຄວາມທຸກຍາກໃນລະດັບອັນຈຳກັດ.

### ຂ. ທ່າແຮງດ້ານການຄ້າຍັງຄົງຖືກນຳໃຊ້ບໍ່ເຕັມສ່ວນ

ໃນໄລຍະ 5 ປີທີ່ສິ້ນສຸດໃນປີ 2019 ການສົ່ງອອກສິນຄ້າຂອງ ສປປ ລາວ ເພີ່ມຂຶ້ນ 10 ສ່ວນຮ້ອຍຕໍ່ປີ ໃນຂະນະທີ່ການນຳເຂົ້າເພີ່ມຂຶ້ນ 1 ສ່ວນຮ້ອຍ. ການຂະຫຍາຍຕົວຂອງການສົ່ງອອກຂອງລາວໃນໄລຍະນີ້ ແມ່ນໄດ້ດີເມື່ອສົມທຽບກັບປະເທດໃນພາກພື້ນ. ແນວໃດກໍ່ຕາມ, ໃນປີ 2019, ສປປ ລາວ ເປັນປະເທດທີ່ມີເສດຖະກິດເປີດກວ້າງໜ້ອຍກວ່າປະເທດເພື່ອນບ້ານອາຊຽນ ຄື: ໄທ, ກຳປູເຈຍ ແລະ ຫວຽດນາມ. ການເປີດກວ້າງທາງດ້ານການຄ້າຂອງລາວແມ່ນຕໍ່າກວ່າລະດັບທ່າແຮງບົ່ມຊ້ອນ ເຊິ່ງໃຊ້ລາຍໄດ້ຕໍ່ຫົວຄົນສຳລັບທັງສິນຄ້າ ແລະການບໍລິການເປັນຕົວບົ່ງບອກ. ນັບແຕ່ປີ 2015, ການສົ່ງອອກສິນຄ້າ ໄປຈີນ, ຫວຽດນາມ, ໄທ ໄດ້ເພີ່ມຂຶ້ນ. ແຫຼ່ງຕົ້ນຕໍ ຂອງການນຳເຂົ້າຍັງສືບຕໍ່ມາຈາກໄທ, ຫວຽດນາມ ແລະ ຈີນ. ການຄ້າການບໍລິການຂ້ອນຂ້າງກະຈຸກຢູ່ໃນການຂົນສົ່ງແລະການທ່ອງທ່ຽວຫຼາຍກວ່າການບໍລິການທີ່ທັນສະໄໝທີ່ຊຸກຍູ້ການແຂ່ງຂັນ.

ໃນປີ 2017 ການສົ່ງອອກທັງໝົດໄດ້ເພີ່ມຂຶ້ນເກືອບ 90 ສ່ວນຮ້ອຍ ເນື່ອງຈາກ ສປປ ລາວ ໄດ້ເລີ່ມສົ່ງອອກພະລັງງານໄຟຟ້າຈາກເຂື່ອນໄຟຟ້ານ້ຳຕົກແຫ່ງໃໝ່. ການສົ່ງອອກແຮ່ທາດ ແລະ ໂລຫະມີຄ່າຍັງສືບຕໍ່ເປັນສິນຄ້າສົ່ງອອກທີ່ສຳຄັນ, ເຖິງວ່າໃນໄລຍະປີ 2013-2019, ສ່ວນແບ່ງຂອງສິນຄ້າເຫລົ່ານີ້ໃນການສົ່ງອອກ ທັງໝົດໄດ້ຫຼຸດລົງ ແລະ ມູນຄ່າການສົ່ງອອກທອງແດງໄດ້ເໜັງຕີງຢ່າງກວ້າງຂວາງຕາມການປ່ຽນແປງຂອງລາຄາສິນຄ້າຂັ້ນຕົ້ນ. ການສົ່ງອອກສິນຄ້າກະສິກຳແລະອຸດສາຫະກຳປຸງແຕ່ງໄດ້ຫຼຸດຄວາມສຳຄັນລົງໂດຍທຽບຖານ; ແນວໃດກໍຕາມ, ທັງສອງກໍຍັງຄົງມີຄວາມສຳຄັນ ແລະ ມີອັດຕາການເຕີບໂຕທີ່ສູງ. ຈາກພື້ນຖານທີ່ຂ້ອນຂ້າງຍັງອ່ອນນ້ອຍໃນປີ 2012-2013, ການສົ່ງອອກຜັກ, ໝາກໄມ້, ໝາກໄມ້ກິນໃບ (ໝາກໄມ້ແຫ້ງເປືອກແຂງ), ເຄື່ອງປະກອບໄຟຟ້າ, ຢາງພາລາ ແລະປະລາດສະຕິກລ້ວນແຕ່ມີການເຕີບໂຕຢ່າງໄວວາ. ການປ່ຽນແປງທີ່ໂດດເດັ່ນອີກອັນໜຶ່ງໃນໄລຍະ 2013-2019 ແມ່ນການຂະຫຍາຍຕົວຢ່າງ

ໄວວາຂອງການສົ່ງອອກເນື້ອໄມ້/ວັດສະດຸເຮັດເຍື່ອເຈ້ຍ ຈາກ 1 ລ້ານໂດລາ ເປັນ 286 ລ້ານໂດລາ. ສຳລັບຂະແໜງເຄື່ອງນຸ່ງຫົ່ມທີ່ໃຊ້ແຮງງານຫລາຍໃນເມື່ອກ່ອນ ເຫັນວ່າການສົ່ງອອກສ່ວນໃຫຍ່ໄປຍັງພາກພື້ນແລະສະຫະພາບເອີຣົບໂດຍລວມແມ່ນຍັງຄົງທີ່.

ນັບຕັ້ງແຕ່ມີບົດ DTIS 2012 ທີ່ຜ່ານມາ, ສປປ ລາວ ໄດ້ຂະຫຍາຍໂຄງປະກອບການສົ່ງອອກສິນຄ້າເພີ່ມຂຶ້ນ. ໃນປີ 2012 ສປປ ລາວ ໄດ້ສົ່ງອອກສິນຄ້າທັງໝົດ 550 ຜະລິດຕະພັນຈາກຈຳນວນລາຍການຜະລິດຕະພັນສິນຄ້າທັງໝົດ 5205 (ຈຳນວນສູງສຸດຂອງຜະລິດພັນສິນຄ້າຕາມລະຫັດສາລະບານເອກະພາບ HS ລະດັບ 6 ຕົວເລກ). ໃນປີ 2019 ນີ້ ໄດ້ເພີ່ມຂຶ້ນສອງເທົ່າເປັນ 1.082 ຜະລິດຕະພັນ. ລະດັບການເພີ່ມຂຶ້ນຂອງຜະລິດຕະພັນໄດ້ຖືກສ່ອງແສງອອກໃນການຄ້າສິນຄ້າເຫລົ່ານີ້ກັບປະເທດເພື່ອນບ້ານ.

**ຄ. ຄວາມຫຼາກຫຼາຍທາງເສດຖະກິດ ທີ່ເກີດຈາກການນຳໃຊ້ໄມ້ງັດດ້ານຊັບສິນທຳມະຊາດ, ທີ່ຕັ້ງພູມສາດ ແລະ ພື້ນຖານໂຄງລ່າງການຂົນສົ່ງທີ່ໄດ້ຮັບການປັບປຸງ**

ກະສິກຳສະໜອງແຫຼ່ງລາຍໄດ້ຕົ້ນຕໍໃຫ້ແກ່ປະມານ 70 ສ່ວນຮ້ອຍຂອງປະຊາກອນ. ການລົງທຶນ ແລະ ການຂະຫຍາຍຕົວໃນຂະແໜງຍຸດທະສາດນີ້ ແມ່ນກຸນແຈສຳຄັນໃນການຫຼຸດຜ່ອນຄວາມທຸກຍາກໃນເຂດຊົນນະບົດ, ແຕ່ຊ້ຳພັດຍັງຄົງຖືກຈຳກັດດ້ວຍລະບຽບການທີ່ບໍ່ຈຳເປັນ. ເຖິງວ່າໄດ້ມີຄວາມໝາຍໝັ້ນໃນການປັບປຸງກະສິກຳ, ລະບຽບການແລະຂັ້ນຕອນການບໍລິຫານທີ່ລ້າສະໄໝແລະຫຍຸ້ງເຫຍີ່ງຍັງເພີ່ມຕົ້ນທຶນໃຫ້ແກ່ການເຮັດທຸລະກິດ, ກີດຂວາງຊາວກະສິກອນໃນການເຂົ້າເຖິງວັດຖຸປະກອນ ຊະນິດຊະນິດໃໝ່ ແລະ ປັບປຸງທີ່ຮັບໃຊ້ກະສິກຳ ແລະ ຖ່ວງດຶງການຂະຫຍາຍຕົວ ຂອງຜະລິດຕະພາບ ຂອງຊາວກະສິກອນຂະໜາດນ້ອຍ. ອົງການຄຸ້ມຄອງບໍລິຫານສ່ວນໃຫຍ່ທັງຢູ່ຂັ້ນສູນກາງ ແລະ ຂັ້ນແຂວງແມ່ນມີເປົ້າໝາຍໃນການກວດກາສິນຄ້າເຄື່ອງຂອງຕົວຈິງ, ການທົດສອບ ແລະ ການຢັ້ງຢືນ ແບບ ເຕັມຮ້ອຍ, ແທນທີ່ຈະນຳໃຊ້ວິທີທີ່ອີງໃສ່ຄວາມສ່ຽງ. ຊາວກະສິກອນຍັງມີຄວາມສ່ຽງທີ່ຈະຖືກກະທົບຕໍ່ການປ່ຽນແປງນະໂຍບາຍທີ່ບໍ່ຄາດຄິດ, ລວມທັງການກຳນົດລາຄາ, ເຊິ່ງເປັນການຂັດຂວາງການຫັນປ່ຽນຈາກກະສິກຳແບບກຸ້ມຕົນເອງພໍໃຊ້ພໍລາວໄປສູ່ການຜະລິດເປັນສິນຄ້າ.

ການທ່ອງທ່ຽວໄດ້ມີການເຕີບໂຕຢ່າງວ່ອງໄວກ່ອນການແຜ່ລະບາດ ຂອງພະຍາດໂຄວິດ-19; ເຖິງວ່າຈະປະສົບກັບການເກີດການຢຸດສະງັກໃນປັດຈຸບັນ, ແຕ່ອະນາຄົດໄລຍະກາງ ແລະ ໄລຍະຍາວຂອງຂະແໜງທ່ອງທ່ຽວຍັງຄົງຢູ່ໃນແງ່ດີ.

## 2. ອົງປະກອບຫຼັກຂອງຍຸດທະສາດທີ່ໄດ້ປັບປຸງເພື່ອຫຼຸດຜ່ອນຕົ້ນທຶນທາງການຄ້າ

ການຫຼຸດຜ່ອນຕົ້ນທຶນທາງການຄ້າແມ່ນມີຄວາມຈຳເປັນເພື່ອກ້າວໄປສູ່ການແຂ່ງຂັນສາກົນ ແລະ ຄວາມຫຼາກຫຼາຍຂອງການສົ່ງອອກ. ການຫຼຸດຕົ້ນທຶນທາງການຄ້າຂອງ ສປປ ລາວ ຮຽກຮ້ອງໃຫ້ມີ 3 ບາດກ້າວທີ່ສຳຄັນ ເພື່ອແນໃສ່ຂະຫຍາຍຄວາມສາມາດແຂ່ງຂັນໃນທົ່ວເສດຖະກິດ ແລະ ເຮັດໃຫ້ການຄ້າທັງສິນຄ້າ ແລະ ທັງການບໍລິການເພີ່ມຂຶ້ນ.

i. ການເຮັດໃຫ້ກະທັດຮັດຂຶ້ນ, ການຫຼຸດຜ່ອນອັດຕາພາສີນຳເຂົ້າ, ການປະຕິຮູບລະບຽບການ ແລະ ທຳນຽມປະຕິບັດທາງດ້ານບໍລິຫານ ຂອງອົງການລັດທີ່ເພີ່ມໃຫ້ລາຄາວັດຖຸປະກອນທີ່ນຳເຂົ້າມາຮັບໃຊ້ການຜະລິດ. ການຫຼຸດຜ່ອນສິ່ງກີດກັນຕໍ່ການນຳເຂົ້າຈະສົ່ງຜົນດີຕໍ່ຄົນທຸກຍາກແບບບໍ່ສະເໝີກັນ.

ii. ການປັບປຸງຄຸນນະພາບ ແລະ ຄວາມໂປ່ງໃສຂອງທຸກລະບຽບການທີ່ກ່ຽວຂ້ອງກັບການຄ້າໂດຍການລົບລ້າງບັນດາລະບຽບການທີ່ເກີນຄວາມຈຳເປັນເຊິ່ງບໍ່ແມ່ນສິ່ງທີ່ຮຽກຮ້ອງຕ້ອງການສຳລັບຄວາມປອດໄພ ຂອງປວງຊົນ, ສະຫວັດດີການ ຫຼືຄວາມກັງວົນດ້ານສິ່ງແວດລ້ອມ, ການເຮັດໃຫ້ກະທັດຮັດ ແລະ ການຕັດຂັ້ນຕອນດ້ານລະບຽບການ ແລະການປັບປຸງປະສິດທິພາບຂອງອົງການບໍລິຫານດ້ວຍການເສີມສ້າງຂີດຄວາມສາມາດ ແລະ ການມຸ້ງເປົ້າຫມາຍ ໃສ່ຊັບ ພະຍາກອນທີ່ຂາດແຄນ ໂດຍຜ່ານການຮັບຮອງເອົາຍຸດທະສາດການຈັດການກັບຄວາມສ່ຽງແບບກວມລວມ.

iii. ການເສີມສ້າງສະພາບແວດລ້ອມທີ່ເອື້ອອຳນວຍໃຫ້ທຸລະກິດ ໂດຍການເຮັດໃຫ້ຄວາມຮຽກຮ້ອງຕ້ອງການໃນການຂຶ້ນທະບຽນທຸລະກິດງ່າຍຂຶ້ນ ແລະ ເປັນແບບອັດຕະໂນມັດ ແລະ ການຫຼຸດຜ່ອນຕົ້ນທຶນໃນການຂົນສົ່ງ ແລະ ໂລຊິດສະຕິກ ແນໃສ່ເຮັດໃຫ້ການເຂົ້າຮ່ວມໃນຕ່ອງໂສ້ມູນຄ່າ ຂອງພາກພື້ນ ແລະ ຂອງໂລກເພີ່ມຂຶ້ນ.

ສິ່ງກີດຂວາງການຄ້າທີ່ບໍ່ແມ່ນພາສີທີ່ບັງຄັບໃຊ້ຢູ່ຊາຍແດນ ແລະ "ຫຼັງຈາກຊາຍແດນໄປ" ປະກອບ ສ່ວນເຮັດໃຫ້ ສປປ ລາວ ມີຕົ້ນທຶນທາງການຄ້າສູງ. ສິ່ງເຫຼົ່ານີ້ລວມມີສິ່ງກີດກັນທາງດ້ານວິຊາການຕໍ່ການຄ້າ, ຂໍ້ກຳນົດດ້ານອະນາໄມ ແລະສຸຂາອະນາໄມພືດ ແລະ ສັດ, ລະບຽບວິທີປະຕິບັດຂອງພາສີ, ລະບຽບການການຄ້າ ແລະ ການຂົນສົ່ງ. ຕ້ອງໃຫ້ມີເຫດຜົນອະທິບາຍວ່າລະບຽບການແມ່ນແນໃສ່ເພື່ອຮັບປະກັນການປະຕິບັດຈຸດປະສົງ ຂອງນະໂຍບາຍສາທາລະນະທີ່ຊອບກົດໝາຍ (ສຸຂະພາບ, ຄວາມປອດໄພ ແລະ ຄວາມສະຫງົບສຸກ). ການຄວບຄຸມທີ່ຫລ້າສະໄໝແລະຂັ້ນຕອນທີ່ຫຍຸ້ງເຫຍີ່ງ ລວມທັງຄວາມລະແວງສົງໃສຕໍ່ກັບພໍ່ຄ້າຊາວຂາຍເອກະຊົນ, ທັງຫມົດແມ່ນປະກອບສ່ວນໃຫ້ຕົ້ນທຶນໃນການຄ້າເພີ່ມຂຶ້ນ.

ການເພີ່ມທະວີການປະສານງານ, ລວມທັງການແລກປ່ຽນຂໍ້ມູນຂ່າວສານລະຫວ່າງບັນດາອົງການຂອງລັດຖະບານທີ່ພົວພັນກັບການແຈ້ງພາສີຢູ່ດ່ານຊາຍແດນ, ຈະຫຼຸດຜ່ອນຄ່າໃຊ້ຈ່າຍ ຂອງການຄ້າຊາຍແດນ. ເປັນສິ່ງຈໍາເປັນທີ່ຕ້ອງໃຫ້ຜູ້ມີສ່ວນໄດ້ສ່ວນເສຍທັງໝົດ ສາມາດເຂົ້າເຖິງຂໍ້ມູນຂ່າວສານທີ່ຖືກຕ້ອງຢ່າງງ່າຍດາຍກ່ຽວກັບລະບຽບການແລະລະບຽບວິທີປະຕິບັດຂອງອົງການບໍລິຫານ ທີ່ຈໍາເປັນ ສໍາລັບການນໍາເຂົ້າ, ການສົ່ງອອກ ແລະການຂົນສົ່ງຜ່ານແດນ ໂດຍການນໍາໃຊ້ສູນຂໍ້ມູນຂ່າວສານການຄ້າແຫ່ງຊາດ NTP. ການຍົກລະດັບ NTP ແມ່ນບູລິມະສິດອັນໜຶ່ງ ເພື່ອໃຫ້ສອງແສງໄດ້ເຖິງປະເພນີປະຕິບັດທີ່ນໍາໜ້າໃນປັດຈຸບັນແລະເພື່ອຮັບປະກັນໃຫ້ມີການຮັກສາໃຫ້ທັນສະໄໝຢູ່ສະເໝີ.

ການເຮັດໃຫ້ນະໂຍບາຍ ແລະ ລະບຽບການຜ່ານດ່ານຊາຍແດນງ່າຍຂຶ້ນ ຈະເພີ່ມລາຍຮັບ ແລະຫຼຸດຜ່ອນຕົ້ນທຶນທາງການຄ້າ. ສປປ ລາວ ຄວນສືບຕໍ່ປັບປຸງລະບຽບວິທີປະຕິບັດການແຈ້ງພາສີໃຫ້ທັນສະໄໝ ໂດຍຜ່ານການປະຕິບັດລະບົບແຈ້ງເສຍພາສີປະຕູດຽວແຫ່ງຊາດແບບເອເລັກໂຕຼນິກ ແລະ ການສ້າງຕັ້ງທີມງານ ລະຫວ່າງອົງການ ເພື່ອຈັດການກັບຄວາມສ່ຽງ JIRM ແນໃສ່ຈັດຕັ້ງປະຕິບັດຂອບຂາຍການບໍລິຫານຄວາມສ່ຽງແບບປະສົມປະສານ IRMF. ການປະຕິບັດວິທີການທີ່ຄົບຖ້ວນສົມບູນໃນການຈັດການກັບຄວາມສ່ຽງ ແມ່ນເປັນວິທີການທີ່ມີປະສິດທິພາບ ເພື່ອຫຼຸດຜ່ອນພາລະຂອງລະບຽບການ ໃນຂະນະດຽວກໍເປັນການເສີມຂະຫຍາຍການບັງຄັບໃຊ້ມາດຕະຖານດ້ານສຸຂະພາບ, ຄວາມປອດໄພ ແລະຄວາມສະຫງົບສຸກທີ່ຈໍາເປັນ. ການຄຸ້ມຄອງຄວາມສ່ຽງຈະຊ່ວຍໃຫ້ ການນໍາໃຊ້ບຸກຄະລາກອນດ້ານວິຊາການທີ່ຂາດແຄນ ແລະ ພື້ນຖານໂຄງລ່າງ ມີປະສິດທິພາບທີ່ສຸດ ແລະຊ່ວຍໃຫ້ການຄ້າມີຄວາມປອດໄພກວ່າເກົ່າ. ການເລັງເປົ້າໝາຍທີ່ບໍ່ຖືກຈຸດໃນການນໍາໃຊ້ຊັບພະຍາກອນເພື່ອຄຸ້ມຄອງ ເປັນການສິ້ນເປືອງ ແລະ ກໍມີປະສິດທິພາບໜ້ອຍກວ່າ. ການໃຫ້ເອົາສິນຄ້າທີ່ຖືກກວດສອບມາແລ້ວ ແລະ ສິນຄ້າທີ່ມີການຢັ້ງຢືນຮັບປະກັນແລ້ວ ມາກວດໃໝ່ອີກກໍພຽງແຕ່ເປັນການນໍາໃຊ້ຊັບພະຍາກອນທີ່ອາດສາມາດຫັນໄປໃຊ້ຢ່າງອື່ນເພື່ອຈະໄຈ້ອອກໃຫ້ໄດ້ເຄື່ອງທີ່ສົ່ງມາແບບມີຄວາມສ່ຽງກວ່າ. ສົນທິສັນຍາສະບັບປັບປຸງສົນທິສັນຍາກຽວໂຕ (RKC) ຂອງອົງການພາສີໂລກ, ສັນຍາການອໍານວຍຄວາມສະດວກດ້ານການຄ້າຂອງອົງການການຄ້າໂລກ ແລະ ແຜນປະຕິບັດງານຍຸດທະສາດການອໍານວຍຄວາມສະດວກດ້ານການຄ້າຂອງປະຊາຄົມເສດຖະກິດອາຊຽນ (AEC) 2025 ລ້ວນແຕ່ຮຽກຮ້ອງໃຫ້ບັນດາສະມາຊິກ ມີການຮັບຮອງເອົາບັນດານະໂຍບາຍບໍລິຫານຄວາມສ່ຽງທີ່ມີປະສິດທິພາບ.

ສປປ ລາວ ປະເຊີນກັບຄ່າໃຊ້ຈ່າຍສິ້ນເປືອງດ້ານໂລຊິດສະຕິກທີ່ສູງຂຶ້ນ ແລະ ຂະບວນການທີ່ໃຊ້ເວລາຫຼາຍກວ່າທຽບກັບບັນດາປະເທດເພື່ອນບ້ານຂອງຕົນສ່ວນໃຫຍ່ຢູ່ໃນພາກພື້ນ. ອັນນີ້ກ່ຽວຂ້ອງກັບປະສິດທິພາບແລະຄວາມໜ້າເຊື່ອຖືຂອງພື້ນຖານໂຄງລ່າງການຂົນສົ່ງ, ອົງການທີ່ຄຸ້ມຄອງຊາຍແດນ, ຜູ້ດັດສົມຄວບຄຸມການຂົນສົ່ງແລະຜູ້ໃຫ້ບໍລິການ. ໃນປີ 2020 ສປປ ລາວ ຖືກຈັດຢູ່ໃນອັນດັບທີ 154 ໃນຈໍານວນ 190 ປະເທດ ດ້ານຄວາມສະດວກໃນການດໍາເນີນທຸລະກິດ. ສິ່ງດັ່ງກ່າວເຮັດໃຫ້ ສປປ ລາວຢູ່ຫຼັງບັນດາປະເທດເພື່ອນບ້ານ ແລະ ບັນດາປະເທດທີ່ນໍາມາສົມທຽບມີມີລະດັບການພັດທະນາທີ່ຄ້າຍຄືກັນທັງໃນທົ່ວໂລກ ແລະ ໃນພາກພື້ນອາຊີ-ປາຊີຟິກ. ເພື່ອຄວາມສະດວກຂອງການຄ້າຂ້າມຊາຍແດນໃນປີ 2020, ໃນຂະນະທີ່ຈໍານວນເອກະສານທີ່ຕ້ອງການໄດ້ຫຼຸດລົງ, ຄ່າໃຊ້ຈ່າຍເພື່ອປະຕິບັດຕາມເອກະສານຂອງການສົ່ງອອກຂອງ ສປປ ລາວ ແມ່ນຫຼາຍກວ່າສອງເທົ່າຂອງກໍາປູເຈຍ, ສູງກວ່າຈີນ 3 ເທົ່າ ແລະ ສູງກວ່າຫວຽດນາມ 69%. ໃນປີ 2020, ສປປ ລາວ ຖືກຈັດຢູ່ໃນອັນດັບທີ 78 ໃນຈໍານວນ 190 ປະເທດ ສໍາລັບການຄ້າຂ້າມຊາຍແດນ ແລະ ຍັງຄົງຢູ່ຫ່າງຈາກເສັ້ນແດນ 20 ສ່ວນຮ້ອຍ (ຜູ້ປະຕິບັດດີທີ່ສຸດຂອງໂລກ).

## 3. ຂໍ້ສະເໜີແນະສໍາລັບຂະແໜງການ

ດ້ານກະສິກໍາ ບູລິມະສິດແມ່ນຊຸກຍູ້ສົ່ງເສີມການຜະລິດເປັນສິນຄ້າຂອງກະສິກໍາຂະໜາດນ້ອຍ. ນີ້ແມ່ນຈຸດຕັ້ງຕົ້ນໃນການເພີ່ມຜະລິດຕະພາບແລະການຂາຍເຂົ້າຕະຫຼາດໃກ້ຄຽງໃຫ້ໄດ້ຫລາຍຂຶ້ນ. ຂໍ້ສະເໜີແນະສະເພາະປະກອບດ້ວຍການເຮັດໃຫ້ລະບຽບການສໍາລັບການນໍາເຂົ້າວັດຖຸປະກອບຮັບໃຊ້ກະສິກໍາງ່າຍຂຶ້ນ, ຍົກເລີກບັນຊີລາຍການລາຄາຕໍ່າສຸດແລະສູງສຸດ, ເຮັດໃຫ້ຄວາມສາມາດຊອກຮູ້ລາຄາເປັນໄປໄດ້ຢ່າງກວ້າງຂວາງໂດຍການສະໜັບສະໜູນການສ້າງຕັ້ງເວທີຂໍ້ມູນຂ່າວສານອອນລາຍທີ່ໃຊ້ກັບມືຖື ເຊິ່ງເນັ້ນເປົ້າໝາຍທີ່ຊາວກະສິກອນ (ໃຫ້ມີຂໍ້ມູນລາຄາ, ຄໍາແນະນໍາດ້ານຜະລິດຕະພາບ ແລະ ອື່ນ ໆ), ຊຸກຍູ້ໃຫ້ມີການພັດທະນາລະບົບຕອງໂສ້ສາງເຢັນສໍາລັບພືດຜັກ ແລະ ສະໜັບສະໜູນການປະຕິຮູບທີ່ສອດທ້ອຍໄປໃນທຸກຂະແໜງການກ່ຽວກັບລະບຽບການໆເຮັດທຸລະກິດ, ບັນດາລະບຽບການ ແລະນະໂຍບາຍສົ່ງເສີມການລົງທຶນ. ການປະຕິຮູບທີ່ສອດທ້ອຍໄປໃນທຸກຂະແໜງການຈະຊຸກຍູ້ການລົງທຶນຂອງເອກະຊົນໃນການຂົນສົ່ງ, ໂລຊິດສະຕິກ, ການເກັບຮັກສາສິນຄ້າໃນສາງ ແລະ ຕອງໂສ້ສາງເຢັນ.

ການຫົດຫາຍໄປຂອງຄວາມຕ້ອງການໆທ່ອງທ່ຽວທີ່ເປັນຜົນມາຈາກການລະບາດຂອງພະຍາດໂຄວິດ-19 ໄດ້ເນັ້ນໃຫ້ເຫັນຄວາມຈໍາເປັນຂອງ ສປປ ລາວ ທີ່ຈະແກ້ໄຂຂໍ້ຈໍາກັດດ້ານການສະໜອງ ເພື່ອໃຫ້ສາມາດຟື້ນຕົວໄດ້ຢ່າງໄວວາເມື່ອໃດການແຜ່ລະບາດຂອງພະຍາດໄດ້ຈາງຫາຍໄປ. ຂໍ້ສະເໜີແນະສະເພາະທີ່ເນັ້ນເປົ້າທີ່ການທ່ອງທ່ຽວແມ່ນມີການສ້າງຕັ້ງສະພາການຕະຫຼາດການທ່ອງທ່ຽວ ເຊິ່ງຖອດຖອນບົດຮຽນຈາກໄທ ແລະ ຫວຽດນາມ. ອັນນີ້, ຈະເຮັດໃຫ້ ສປປ ລາວ ຖືກນໍາສະເໜີໃນແງ່ການຕະຫລາດວ່າເປັນສະຖານທີ່ທ່ອງທ່ຽວທີ່ໄດ້ຜົນກວ່າເກົ່າ. ຂໍ້ສະເໜີແນະອື່ນໆລວມມີການປັບປຸງລະບຽບການທ່ອງທ່ຽວ, ຈັດຕັ້ງການຝຶກອົບຮົມເພື່ອແກ້ໄຂສະພາບບໍ່ພຽງພໍຂອງຊັບພະຍາກອນມະນຸດ ແລະຈັດຕັ້ງປະຕິບັດຢ່າງແຂງແຮງບັນດາມາດຕະການປົກປັກຮັກສາສິ່ງແວດລ້ອມເພື່ອເພີ່ມຄວາມຕ້ອງການການທ່ອງທ່ຽວ

ທຳມະຊາດ. ຂະແໜງການທ່ອງທ່ຽວຍັງຈະໄດ້ຮັບຜົນປະໂຫຍດຈາກການປັບປຸງສະພາບແວດລ້ອມທີ່ເອື້ອອຳນວຍແກ່ການເຮັດທຸລະກິດ ເຊິ່ງກວມເອົາຫລາຍຂະແໜງການ ແລະ ຈາກການເຈລະຈາລະຫວ່າງພາກລັດແລະທຸລະກິດທີ່ມີປະສິດທິຜົນກວ່າ.

ການເພີ່ມທະວີການລົງທຶນໃນອຸດສາຫະກຳປຸງແຕ່ງຮຽກຮ້ອງໃຫ້ມີການປັບປຸງສະພາບແວດລ້ອມທີ່ເອື້ອອຳນວຍແກ່ການເຮັດທຸລະກິດ. ຂະແໜງອຸດສາຫະກຳປຸງແຕ່ງທີ່ຍັງໃໝ່ຕົ້ນຕໍແມ່ນປະກອບດ້ວຍບັນດາວິສາຫະກິດທີ່ມີຂະໜາດນ້ອຍ ແລະ ກາງທີ່ນຳໃຊ້ແຮງງານຫຼາຍ, ມີຜະລິດຕະພາບຕ່ຳເຊິ່ງຜະລິດຮັບໃຊ້ຕະຫຼາດພາຍໃນປະເທດ. ມີພຽງແຕ່ 5 ສ່ວນຮ້ອຍຂອງກຳລັງແຮງງານທັງຫມົດທີ່ເຮັດວຽກໃນອຸດສາຫະກຳປຸງແຕ່ງ. ໃນປີ 2018, ສປປ ລາວ ມີມູນຄ່າເພີ່ມຂອງອຸດສາຫະກຳປຸງແຕ່ງ MVA ຕໍ່ຫົວຄົນຄາດຄະເນປະມານ 200 ໂດລາ (ໃນລາຄາຄົງທີ່ 2010 ເປັນໂດລາ). ອັນນີ້ແມ່ນຕ່ຳກວ່າລະດັບສະເລ່ຍຂອງພາກພື້ນຢ່າງມີໄນຍະສຳຄັນ ຄື $1000 MVA ຕໍ່ຫົວຄົນ. ຫຼາຍກວ່າເຄິ່ງຫນຶ່ງຂອງການສົ່ງອອກສິນຄ້າອຸດສາຫະກຳແມ່ນໂລຫະພື້ນຖານ, ຊິ້ນສ່ວນກ້ອງຖ່າຍຮູບແລະຊິ້ນສ່ວນທີ່ກ່ຽວຂ້ອງກັບການບັນທຶກສຽງແລະພາບ, ອາຫານແລະເຄື່ອງດື່ມ, ເຄື່ອງນຸ່ງຫົ່ມ ແລະຜະລິດຕະພັນໄມ້. ບົດລາຍງານການພັດທະນາອຸດສາຫະກຳປີ 2017 (DIH/MOIC) ໃຫ້ຂໍ້ສັງເກດວ່າ: ຂະແໜງອຸດສາຫະກຳປຸງແຕ່ງແມ່ນຂາດການເຂົ້າເຖິງສິນເຊື່ອ, ມີພື້ນຖານໂຄງລ່າງດ້ານໂລຊິດສະຕິກທີ່ບໍ່ດີ, ການສະໜັບສະ ໜູນດ້ານນະໂຍບາຍທີ່ຈຳກັດ ແລະ ການປະຕິບັດກົດໝາຍທີ່ມີຢູ່ແລ້ວຍັງບໍ່ເຂັ້ມງວດ.

ບໍລິສັດອຸດສາຫະກຳປຸງແຕ່ງຈຳນວນໜ້ອຍກວມເອົາການສົ່ງອອກຂອງອຸດສາຫະກຳປຸງແຕ່ງເກືອບທັງຫມົດ. ມີພຽງແຕ່ 5 ສ່ວນຮ້ອຍຂອງວິສາຫະກິດທັງໝົດທີ່ມີພະນັກງານຫຼາຍກວ່າ 200 ຄົນ; ຢ່າງໃດກໍ່ຕາມ, ຈຳນວນເຫຼົ່ານີ້ກວມເອົາເກືອບທັງຫມົດຂອງວິສາຫະກິດສົ່ງອອກ. ຂໍ້ສະເໜີແນະສະເພາະເພື່ອໃຫ້ອຸດສາຫະກຳປຸງແຕ່ງເພີ່ມຂຶ້ນລວມມີການສ້າງຄວາມເຂັ້ມແຂງດ້ານສະພາບແວດລ້ອມທີ່ເອື້ອອຳ ນວຍແກ່ການເຮັດທຸລະກິດ, ການປັບປຸງປະສິດທິພາບ ແລະຄຸນນະພາບຂອງການບໍລິການ(ໃນຖານະເປັນປັດໄຈຮັບໃຊ້ອຸດສາຫະກຳປຸງແຕ່ງ), ການປະຕິຮູບລະບຽບການແບບຮີບດ່ວນເພື່ອຊຸກຍູ້ສົ່ງເສີມ ການແຂ່ງຂັນແລະປະສິດທິພາບໃນການບໍລິການຂົນສົ່ງ ແລະໂລຊິດສະຕິກ, ການທົບທວນຄືນແລະການປະຕິຮູບນະໂຍບາຍສົ່ງເສີມຕ່າງໆເພື່ອດຶງດູດການລົງທຶນທີ່ສະແຫວງຫາ"ປະສິດທິພາບ" ເຊິ່ງຈະເປັນການກ້າວໄປສູ່ຄວາມຫຼາກຫຼາຍ.

ມາຮອດປະຈຸບັນ, ເຂດເສດຖະກິດພິເສດໄດ້ສ້າງວຽກເຮັດງານທຳບໍ່ຫຼາຍປານໃດ ແລະ ປະກອບສ່ວນພໍປະມານດ້ານເສດຖະກິດໃຫ້ແກ່ການເກັບລາຍຮັບຂອງລັດຖະບານ. ໃນປັດຈຸບັນມີປະສົບການຫລວງຫລາຍຈາກປະເທດຕ່າງໆກ່ຽວກັບການການສ້າງຕັ້ງແລະການດຳເນີນງານຂອງ SEZs. ຮອດເວລາແລ້ວທີ່ຈະປະເມີນປະສົບການຂອງລາວມາເຖິງປັດຈຸບັນ ໃສ່ກັບປະສົບການຂອງຄູ່ສົມທຽບ ແລະ ພາກປະຕິບັດທີ່ນຳໜ້າ. ແນະນຳໃຫ້ ສປປ ລາວ ທົບທວນຄືນນະໂຍບາຍ ແລະ ລະບຽບການບໍລິຫານທີ່ມີຢູ່ແລ້ວສຳລັບເຂດເສດຖະກິດພິເສດ.

**1. ບົດຮຽນທີ່ຖອດຖອນໄດ້ຈາກແຜນດຳເນີນງານຂະແໜງການຄ້າ ແລະ ພາກທຸລະກິດເອກະຊົນ ປີ 2012 ແລະ ການເຜີຍແຜ່ແຜນດຳເນີນງານ ປີ 2022 ສະບັບໃໝ່**:

ເຖິງວ່າຈະມີຄວາມຄືບໜ້າຢ່າງຫຼວງຫຼາຍກໍ່ຕາມ, ແຕ່ຫຼາຍບັນຫາດ້ານລະບຽບ ແລະ ນະໂຍບາຍທີ່ໄດ້ກຳນົດໄວ້ໃນແຜນດຳເນີນງານປີ 2012 ຍັງຄົງຖືກຕ້ອງ. ບົດ DTIS ປັບປຸງເປັນປັດຈຸບັນ ໄດ້ທົບທວນຄວາມຄືບໜ້າໃນການຈັດຕັ້ງປະຕິບັດແຜນດຳເນີນງານປີ 2102 ແລະ ພະຍາຍາມຕໍ່ຍອດບົດຮຽນທີ່ຖອດຖອນໄດ້. ບົດຮຽນຕົ້ນຕໍຈາກການປະຕິບັດແຜນດຳເນີນງານປີ 2012 ລວມມີ:

ບູລິມະສິດຈຳນວນຫລາຍທີ່ລະບຸໄວ້ບໍ່ໄດ້ແກ້ໄຂສິ່ງທ້າທາຍໃນການປະສານງານ ແລະການຈັດ ລຳດັບກ່ອນຫລັງ. ໂດຍໄດ້ກຳນົດການແກ້ໄຂບັນຫາ 100 ກວ່າຢ່າງ ທີ່ຖືກຈັດວາງຢູ່ໃນສາມເສົາຄ້ຳ ແລະ 12 ຂົງເຂດທີ່ກວມເອົາຫຼາຍກະຊວງ ແລະ ອົງການຄຸ້ມຄອງຂອງລັດ, ໃນນັ້ນພັດໄດ້ເອົາໃຈໃສ່ໜ້ອຍດຽວຕໍ່ບັນດາສິ່ງທ້າທາຍຂອງການປະສານງານ, ຕໍ່ຂີດຄວາມສາມາດ ແລະ ຕໍ່ຄວາມຕ້ອງການໃນການຈັດລຳດັບກ່ອນຫລັງຂອງການເຄື່ອນໄຫວ.

ບົດ DTIS ໄດ້ໃຫ້ບູລິມະສິດການເພີ່ມທະວີການປຶກສາຫາລືລະຫວ່າງພາກລັດ ແລະ ທຸລະກິດເອກະຊົນ ລວມທັງການເອົາພາກສ່ວນສັງຄົມພົນລະເຮືອນມາເຂົ້າຮ່ວມນຳ ໃນສ່ວນທີ່ກ່ຽວກັບຄວາມສຳຄັນຂອງການເຊື່ອມໂຍງທາງດ້ານການຄ້າ, ການຫຼຸດຜ່ອນຕົ້ນທຶນໃຫ້ການຄ້າ ແລະການເພີ່ມທະວີການຄ້າກັບພາກພື້ນ ແລະ ກັບໂລກ. ຂະບວນການ EIF ໄດ້ອຳນວຍໃຫ້ແກ່ການສ້າງຕັ້ງຄະນະກຳມະການແຫ່ງຊາດເພື່ອອຳນວຍຄວາມສະດວກທາງດ້ານການຄ້າ (NTFC) ແລະ ເປັນເຄື່ອງມືສຳຄັນໃນການນຳໃຊ້ປະໂຫຍດຈາກເງິນທຶນທີ່ມີເພື່ອໃຫ້ມີການສະຫນັບສະຫນູນ TPSWG ແລະ NTFC. ການເຂົ້າຮ່ວມຂອງຜູ້ໃຫ້ທຶນຫຼາຍຝ່າຍໃນ TPSWG ເຮັດໃຫ້ມີການແລກປ່ຽນຂໍ້ມູນຢ່າງໂປ່ງໃສ ແລະ ການຄົ້ນຄວ້າໃນແງ່ການນຳໃຊ້, ເສີມຂະຫຍາຍການປະສານງານຂອງຜູ້ໃຫ້ທຶນ ແລະ ເຮັດໃຫ້ສາມາດວາງແຜນງານໂຄງການຢ່າງມີປະສິດທິພາບກວ່າເກົ່າ ແລະ ເພີ່ມປະສິດທິຜົນຂຶ້ນ.

ຫຼາຍໆກິດຈະກຳທີ່ໄດ້ລະບຸໄວ້ໃນບົດ DTIS ປີ 2012 ແມ່ນມີຄວາມຊັບຊ້ອນ ແລະ ຕ້ອງການຄວາມຊຳນານງານແລະປະສົບການທາງດ້ານວິຊາການສູງ ເພື່ອຈັດຕັ້ງປະຕິບັດໃຫ້ປະສົບຜົນສຳເລັດ. ສິ່ງສຳຄັນຄືໃຫ້ຮັບຮູ້ວ່າການຈັດຕັ້ງ

ປະຕິບັດຈະເປັນຂະບວນການທີ່ໃຊ້ເວລາຫຼາຍປີ ເຊິ່ງຮຽກຮ້ອງໃຫ້ມີການຮ່ວມມືລະຫວ່າງອົງການ.

ຜູ້ມີສ່ວນໄດ້ສ່ວນເສຍທີ່ສຳຄັນຈຳນວນຫລາຍ ໄດ້ພະເຊີນໜ້າກັບສິ່ງທ້າທາຍທາງດ້ານວິຊາການໃນການຈັດຕັ້ງປະຕິບັດຂໍ້ສະເໜີແນະ. ການຮ່ວມມືລະຫວ່າງພາກລັດ ແລະ ທຸລະກິດເອກະຊົນທີ່ມີປະສິດທິຜົນໃນບັນຫາການອຳນວຍຄວາມສະດວກທາງດ້ານການຄ້າ ຮຽກຮ້ອງໃຫ້ມີຄວາມເຂົ້າໃຈກ່ຽວກັບປະເພນີປະຕິບັດທີ່ນຳໜ້າ ແລະຄວາມເຊື່ອທີ່ວ່າລັດຖະບານເປັນ "ຜູ້ອຳນວຍຄວາມສະດວກ" ເພື່ອຊ່ວຍການຂະຫຍາຍຕົວ ຂອງພາກທຸລະກິດເອກະຊົນ. ບັນດາໜ່ວຍງານຂອງຂະແໜງການແມ່ນມີຂີດຄວາມສາມາດຈຳກັດ, ການປະສານງານລະຫວ່າງກະຊວງຍັງບໍ່ແຂງແຮງ ແລະ ການຂາດຄວາມໝາຍໝັ້ນຂອງບັນດາກະຊວງສາຍຕັ້ງໃນການແກ້ໄຂບັນຫາພາກທຸລະກິດເອກະຊົນ.

ການປະສານງານລະຫວ່າງອົງການ ທີ່ຍັງມີຂໍ້ຈຳກັດ ແລະ ການບໍ່ມີລະບົບການຕິດຕາມ. ຜົນກະທົບທາງລົບຂອງ ໂຄວິດ-19 ຕໍ່ເສດຖະກິດ ໄດ້ເສີມສ້າງມານະຈິດທາງດ້ານການເມືອງລະດັບສູງໃນການປັບປຸງສະພາບແວດລ້ອມແຫ່ງການດຳເນີນທຸລະກິດ; ແນວໃດກໍ່ຕາມ, ການ ຈັດຕັ້ງປະຕິບັດການປະຕິຮູບກໍຍັງມີຄວາມຫຍຸ້ງຍາກເນື່ອງຈາກການປະສານງານລະຫວ່າງອົງ ການທີ່ຍັງມີຂໍ້ຈຳກັດ ແລະ ການບໍ່ມີລະບົບການຕິດຕາມ.

ບົດ DTIS ສະບັບປັບປຸງໃນປັດຈຸບັນ ຂອງ ສປປ ລາວ ປີ 2022 ເປັນການເປີດໂອກາດໃຫ້ລັດຖະບານ ແລະ ພາກທຸລະກິດເອກະຊົນໄດ້ປັບປຸງແຜນດຳເນີນງານຂະແໜງການຄ້າ ແລະ ພາກທຸລະກິດເອກະຊົນ. ບົດ DTIS ສະບັບປັບປຸງຂອງ ສປປ ລາວ ໄດ້ກຳນົດບູລິມະສິດທີ່ກ່ຽວຂ້ອງກັບການຄ້າເຊິ່ງມີທ່າແຮງໃນການຫຼຸດຜ່ອນຄວາມທຸກຍາກຢ່າງສູງສຸດ, ສົ່ງເສີມການເຕີບໂຕແບບຍືນຍົງ ແລະ ສ້າງຄວາມສາມາດຟື້ນຕົວຢ່າງໄວວາໃຫ້ແກ່ການເຕີບໂຕຄືນໃໝ່ຫຼັງໂຄວິດ-19, ດ້ວຍການຫຼຸດຜ່ອນຕົ້ນທຶນທາງການຄ້າ ແລະ ວິທີປະຕິບັດໃນການຄຸ້ມຄອງດັດສົມທີ່ດີຂຶ້ນ.

ການປັບປຸງນີ້ເປັນໂອກາດໃຫ້ລັດຖະບານເພື່ອຈັດວາງນະໂຍບາຍ ແລະ ຍຸດທະສາດການຄ້າໃຫ້ດີກວ່າເກົ່າເພື່ອໃຫ້ສອດຄ່ອງ ກັບຄຳໝັ້ນສັນຍາ ຂອງຕົນ ໃນການຫັນໄປສູ່ຄວາມຫຼາກຫຼາຍທາງດ້ານເສດຖະ ກິດ ແລະ ການຫຼຸດຜ່ອນຄວາມທຸກຍາກ ໃນໄລຍະທີ່ເປັນການຟື້ນຟູຄືນໃໝ່ຫຼັງໂຄວິດ-19 ແລະ ການກ້າວໄປສູ່ການຫລຸດພົ້ນຈາກສະຖານະພາບປະເທດດ້ອຍພັດທະນາ (LDC) ໃນປີ 2026, ໂດຍມີການລຽງລາຍການໆເຄື່ອນໄຫວທີ່ມີກຳນົດເວລາຜູກມັດ, ການຮັບປະກັນການຕິດຕາມກວດກາຢ່າງເປັນກິດຈະວັດ ແລະ ມີການລາຍງານຄວາມຄືບໜ້າໃຫ້ທຸກພາກສ່ວນກ່ຽວຂ້ອງ.

ບົດ DTIS ໄດ້ນຳສະເໜີແຜນດຳເນີນງານຂອງຂະແໜງການຄ້າ ແລະພາກທຸລະກິດເອກະຊົນທີ່ໄດ້ປັບປຸງໃໝ່ເຊິ່ງເປັນການສະຫລຸບສັງລວມກຸ່ມປະຕິຮູບນະໂຍບາຍທີ່ໄດ້ຖືກສະເໜີແນະ. ຮ່າງແຜນນີ້ຈະໄດ້ມີສົນທະນາປຶກສາຫາລືຈາກຫຼາຍພາກສ່ວນທີ່ມີສ່ວນໄດ້ສ່ວນເສຍຈາກພາກລັດ, ພາກເອກະຊົນ ແລະ ສັງຄົມພົນລະເຮືອນ/ປະຊາສັງຄົມ ໃນກອງປະຊຸມສຳມະນາເພື່ອກ້າວສູ່ການຮັບຮອງທີ່ຈະຈັດຢູ່ນະຄອນຫຼວງວຽງຈັນ ແລະ ໃນທົ່ວປະເທດ. ພາຍຫລັງການປຶກສາຫາລືເຫຼົ່ານີ້ແລ້ວ, ຈະໄດ້ປັບແຜນດຳເນີນງານນີ້ເປັນສະບັບສຸດທ້າຍ. ສະຫລຸບລວມແລ້ວ, ບັນດາລາຍການດຳເນີນງານຈະປະກອບສ່ວນຫຼຸດຜ່ອນຕົ້ນທຶນໃຫ້ການຄ້າ, ເຮັດໃຫ້ວິສາຫະກິດ ແລະ ຊາວກະສິກອນຂອງລາວສາມາດແຂ່ງຂັນໄດ້ໃນຕະຫຼາດພາກພື້ນ ແລະ ສາກົນ ຢ່າງມີຜົນສຳເລັດ ທີ່ດີກວ່າ ແລະ ບັນລຸເປົ້າໝາຍຂອງ ສປປ ລາວ ໃນການຫັນສູ່ການເຕີບໂຕເສດຖະກິດທີ່ມີຄວາມຫລາກຫລາຍ ທາງດ້ານຂະແໜງການ, ຂະຫຍາຍການສົ່ງອອກ, ສ້າງວຽກເຮັດງານທຳ, ຫຼຸດຜ່ອນຄວາມທຸກຍາກ ແລະ ກ້າວໄປສູ່ການຂ້າມຜ່ານສູ່ ເສດຖະກິດທີ່ມີລາຍໄດ້ປານກາງຕໍ່າ.

**ແຜນພັດທະນາຂະແໜງການຄ້າ ແລະພາກເອກະຊົນ**
**ກົນໄກການຈັດຕັ້ງປະຕິບັດ**

ບົດ DTIS ຂອງສປປ ລາວ ສະບັບທຳອິດ ໃນປີ 2006, ໄດ້ຖືກຈັດຕັ້ງປະຕິບັດໂດຍທະນາຄານໂລກ, ເຊິ່ງໄດ້ເປັນຄູ່ຮ່ວມກັບລັດຖະບານໃນການສ້າງຕັ້ງໜ່ວຍງານຈັດຕັ້ງປະຕິບັດໂຄງການ (PIU) ເພື່ອຄຸ້ມຄອງຂະບວນການ ແລະ ຈັດຕັ້ງປະຕິບັດ ຕາຕະລາງແຜນກິດຈະກຳວຽກງານລະອຽດ Action Matrix. ພາຍ ຫລັງ ແຜນວຽກຕາມ Action Matrix ໄດ້ຮັບການອະນຸມັດໃນກອງປະຊຸມຮັບຮອງ, PIU ໄດ້ຫັນມາເປັນພະແນກຄຸ້ມຄອງການຈັດຕັ້ງປະຕິບັດໂຄງການຊ່ວຍເຫຼືອຂອງຕ່າງປະເທດ (NIU), ທີ່ສັງກັດໃນກົມແຜນ ການ ແລະ ການຮ່ວມມື (DPC) ໃນ MOIC ແລະ ກາຍເປັນ "ໜ່ວຍງານການປະສານງານ ແລະ ການຄຸ້ມຄອງດ້ານການຊ່ວຍເຫຼືອທາງດ້ານການຄ້າ (AfT).[1] ໃນເບື້ອງຕົ້ນ NIU ໄດ້ຮັບຜິດຊອບສຳລັບໂຄງການພັດທະນາດ້ານການຄ້າຄັ້ງທຳອິດ ທີ່ເປັນກອງທຶນສົມທົບຫລາຍຝ່າຍ. ໃນປີ 2009 ລັດຖະ ບານໄດ້ອະນຸມັດ ໃຫ້ NIU ເປັນພະແນກການຊ່ວຍເຫຼືອທາງການເພື່ອການພັດທະນາ (ODA) ຂອງ MOIC, ໂດຍມີພະນັກງານຖາວອນ ຂອງລັດເປັນຫົວໜ້າ, ມີພະນັກງານວິຊາການ, ທີ່ປຶກສາສາກົນ ແລະ ຊ່ຽວຊານທີ່ປຶກສາ.

NIU ມີຄວາມຮັບຜິດຊອບຢ່າງແທ້ຈິງໃນການຈັດຕັ້ງປະຕິບັດວາລະການພັດທະນາດ້ານການຄ້າແລະເຮັດໜ້າທີ່ເປັນກອງເລຂານຸການຂອງຄະນະກຳມະການປະສານງານລະດັບຊາດ ວ່າດ້ວຍການເຊື່ອມໂຍງເສດ ຖະກິດກັບສາກົນ (NSCEI) ແລະກອງເລຂາ EIF ຂອງ ສປປ ລາວ. NSCEI ໃຫ້ທິດຊີ້ນຳທາງດ້ານນະໂຍບາຍຕໍ່ໜ່ວຍງານຂະແໜງການຄ້າ ແລະ ພາກເອກະຊົນ (TPSWG) ສຳລັບການພັດທະນາດ້ານວິຊາການຂອງການເຄື່ອນໄຫວວຽກງານການຄ້າ. TPSWG ສະໜອງຂໍ້ມູນເຂົ້າໃນກອງປະຊຸມປຶກສາຫາລືລະຫວ່າງພາກລັດຖະບານ ແລະ ຄູ່ຮ່ວມພັດທະນາ, ເຊິ່ງຂະບວນການກອງປະຊຸມໂຕະມົນເປັນຜູ້ຄຸ້ມຄອງບໍລິຫານ.

1. ບົດວິໄຈການເຊື່ອມໂຍງເຂົ້າສາກົນດ້ານການຄ້າ, 2012, ໜ້າ 93

TPSWG ຊ່ວຍເຊື່ອມສຳພັນທາງດ້ານການຈັດຕັ້ງກັບບັນດາກົນໄກການປຶກສາຫາລືທີ່ກຳລັງດຳເນີນຢູ່ໃນເວທີອື່ນໆ. ໃນນີ້ລວມມີໜ່ວຍງານຂະແໜງເສດຖະກິດມະຫາພາກ, ກອງເລຂາການຄ້າເພື່ອການພັດທະນາ (T4D), ຄະນະກຳມະການອຳນວຍຄວາມສະດວກທາງດ້ານການຄ້າແຫ່ງຊາດ ແລະ ການຈັດຕັ້ງການປຶກສາຫາລືພາກລັດ ແລະ ເອກະຊົນ (ກອງປະຊຸມທຸລະກິດລາວ, ກອງປະຊຸມປຶກສາລະຫວ່າງພາກລັດກັບພາກເອກະຊົນຂັ້ນແຂວງ). TPSWG ເປັນອົງກອນປະສົມປະສານການສົນທະນາ ແລະ ການປຶກສາຫາລືທາງຍຸດທະສາດກ່ຽວກັບນະໂຍບາຍການພັດທະນາຂະແໜງການຄ້າ ແລະ ພາກເອກະຊົນ ແລະ ການ ຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ພາຍໃນກົນໄກ ຂອງໜ່ວຍງານຂະແໜງການໃນຂອບກອງປະຊຸມໂຕະມົນ.

ໃນປີ 2011 NIU ໄດ້ຮັບຜິດຊອບໃນການປັບປຸງ DTIS ເປັນສະບັບໃໝ່ ແລະ ຄຸ້ມຄອງຂະບວນການ DTIS, ລວມທັງການຕິດຕາມການຈັດຕັ້ງປະຕິບັດ Action Matrix. ພາຍຫຼັງກອງປະຊຸມການຮັບຮອງ DTIS ໃນປີ 2012, Action Matrix ໄດ້ຖືກລວມເຂົ້າໃນແຜນດຳເນີນງານການພັດທະນາຂະແໜງການຄ້າ ແລະ ພາກເອກະຊົນຂອງ ສປປ ລາວ. ຂະບວນການ DTIS ສະບັບປັບໃໝ່ (DTISU) ປີ 2012 ໄດ້ສົ່ງຜົນໃຫ້ມີການຍົກລະດັບ TPSWG ໃຫ້ກາຍເປັນພາຫະນະຫຼັກທາງດ້ານການຈັດຕັ້ງ ເພື່ອຮັບປະກັນການປຶກສາຫາລື ແລະ ການປະສານງານຂອງພາກສ່ວນກ່ຽວຂ້ອງຢ່າງມີປະສິດທິຜົນລະຫວ່າງ GOL, ຄູ່ຮ່ວມພັດທະນາ (DPs) ແລະ ພາກສ່ວນກ່ຽວຂ້ອງອື່ນໆ ກ່ຽວກັບການພັດທະນາດ້ານການຄ້າ ແລະ ພາກເອກະຊົນ. TPSWG ຮັບປະກັນການເປັນເຈົ້າການຂອງລັດຖະບານ ແລະ ການນຳໜ້າພາທາງໃນບັນຫາຍຸດທະສາດໂດຍການສັງລວມ ແລະ ການປັບວາລະ ຂອງຂະແໜງການຄ້າ ແລະ ພາກເອກະຊົນໃຫ້ໄປລວງດຽວກັນກັບແຜນການ 5 ປີ ຂອງ MOIC.

TPSWG ສົ່ງເສີມຄວາມສອດຄ່ອງພາຍໃນ ແລະ ເຄື່ອນໄຫວເພື່ອເສີມສ້າງການເຊື່ອມສຳພັນລະຫວ່າງການພັດທະນາຂະແໜງການຄ້າ ແລະ ພາກເອກະຊົນ ໂດຍຜ່ານການມີສ່ວນຮ່ວມຢ່າງທົ່ວເຖິງຂອງພາກສ່ວນກ່ຽວຂ້ອງ ເພື່ອແນໃສ່ສ້າງສັນທາມະຕິສຳລັບແຜນດຳເນີນງານ. TPSWG ຮັບປະກັນວ່າແຫຼ່ງທຶນທີ່ໄດ້ລະດົມມາໄດ້ຖືກຈັດສັນໃຫ້ແກ່ບູລິມະສິດຂອງຂະແໜງການ, ໃຫ້ມີການຕິດຕາມ ແລະ ລາຍງານຢ່າງໂປ່ງໃສ ໂດຍປະສານສົມທົບກັບບັນດາກະຊວງຫຼັກ (MPI, MOF, MAF, ແລະ MOFA) ແລະ DPs ຕາມຫຼັກການປາຣີ ແລະ ຖະແຫຼງການວຽງຈັນວ່າດ້ວຍ ປະສິດທິຜົນການຊ່ວຍເຫຼືອ.

ຄະນະຊີ້ນຳ EIF ສຳລັບຂະບວນການ DTIS ໄດ້ສັງກັດຢູ່ໃນ TPSWG ແລະ NIU ໄດ້ຖືກມອບໝາຍໃຫ້ເຮັດໜ້າທີ່ເປັນກອງເລຂາດ້ານວິຊາການ ຂອງ TPSWG ພາກຂະຫຍາຍ (ເບິ່ງຕາຕະລາງ 1 ສຳລັບສະມາຊິກ) ແລະຮັບປະກັນການເຊື່ອມໂຍງພາຍໃນໂຄງປະກອບດ້ານການຈັດຕັ້ງທີ່ມີຢູ່ແລ້ວ. NIU ໄດ້ສືບຕໍ່ດຳເນີນງານເປັນໜ່ວຍງານພາຍໃນກົມແຜນການ ແລະການຮ່ວມມື (DPC) ໃນ MOIC.

### ຕາຕະລາງທີ 1.1 ບັນດາສະມາຊິກ ຂອງ TPSWG

| | |
|---|---|
| **ລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ** | **ປະທານຮ່ວມ** |
| **ເອກອັກຄະລັດຖະທູດ (ຜູ້ໃຫ້ທຶນຕົ້ນຕໍ ດ້ານການຄ້າ)** | **ປະທານຮ່ວມ** |
| NIU/DPC | **ກອງເລຂາດ້ານວິຊາການ** |
| **ພະນັກງານຈາກກະຊວງສາຍຕັ້ງຕ່າງໆ** | **ສະມາຊິກ** |
| **ພະນັກງານວິຊາການຈາກຄູ່ຮ່ວມມືສາກົນ** | **ສະມາຊິກ** |
| **ເຈົ້າໜ້າທີ່ສະຖານທູດ** | **ສະມາຊິກ** |
| **ຜູ້ອຳນວຍການໂຄງການ / ທີ່ປຶກສາດ້ານວິຊາການຈາກໂຄງການຂອງຜູ້ໃຫ້ທຶນທີ່ກ່ຽວຂ້ອງ** | **ສະມາຊິກ** |
| **ພາກເອກະຊົນ/ສັງຄົມພົນລະເຮືອນ ລວມທັງຜູ້ຕາງໜ້າຈາກສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ (LNCCI) ແລະ ສະຫະພັນແມ່ຍິງລາວ (LWU) ແລະ ອື່ນໆ.** | **ສະມາຊິກ** |
| **ນັກຄົ້ນຄວ້າວິຊາການ** | **ສະມາຊິກ** |
| ຜູ້ອື່ນໆຕາມການເຊີນ | ສະມາຊິກ |

ຈຸດປະສົງ ຂອງ TPSWG ແມ່ນເພື່ອສົ່ງເສີມການພັດທະນາຂະແໜງການຄ້າ ແລະ ພາກເອກະຊົນ ໂດຍຜ່ານການຈັດໃຫ້ມີເວທີປຶກສາຫາລື ແລະ ການປະສານງານລະຫວ່າງ GOL ແລະ ຄູ່ຮ່ວມພັດທະນາ ແລະ ພາກສ່ວນກ່ຽວຂ້ອງອື່ນໆ ກ່ຽວກັບບັນຫາຂອງຂະແໜງການ ຫຼື ບັນຫາຕາມຫົວຂໍ້ ຫຼື ບັນຫາທີ່ສ້ອຍຫ້ອຍກັບຂະແໜງການຕ່າງໆ. TPSWG ສະໜັບສະໜູນການກຳນົດນະໂຍບາຍ ແລະ ບູລິມະສິດ, ການລະດົມແຫຼ່ງທຶນພາຍໃນ ແລະ ພາຍນອກ, ພາຍໃນຂອບຂາຍທີ່ເນັ້ນຜົນໄດ້ຮັບ ແລະ ຕິດຕາມຄວາມຄືບໜ້າ ແລະ ການບັນລຸຜົນສຳເລັດ. ການມີສ່ວນຮ່ວມໃນລະດັບສູງຈາກ GOL, ຄູ່ຮ່ວມພັດທະນາ ແລະ ພາກສ່ວນກ່ຽວຂ້ອງອື່ນໆ ຮັບປະກັນວ່າກິດຈະກຳຕ່າງໆຖືກສັງລວມເຂົ້າໃນບູລິມະສິດຂອງ GOL ແລະ ສົ່ງເສີມການປະສານງານຢ່າງມີປະສິດທິຜົນ. NIU ໄດ້ເປັນເຈົ້າຂອງ ແລະ ຄຸ້ມຄອງຂະບວນການປັບປຸງ DTIS ຄືນ ໃໝ່. ໂຄງສ້າງ EIF ໄດ້ຖືກລວມເຂົ້າກັບ TPSWG ເຊິ່ງການເປີດໃຈໃນການປຶກສາຫາລືຈະຊຸກຍູ້ໃຫ້ເກີດຄວາມຍິນຍອມພ້ອມໃຈໃນການພັດທະນາໄປໃນທົ່ວບັນດາກະຊວງ ແລະອົງການຂອງລັດຖະບານ.

NIU ໄດ້ກຳນົດສາມບົດຮຽນທີ່ສຳຄັນຈາກປະສົບການຂອງຕົນເອງໃນການຈັດຕັ້ງປະຕິບັດແຜນດຳເນີນງານການພັດທະນາຂະແໜງການຄ້າ ແລະ ພາກເອກະຊົນ ໃນປີ 2012. ກ່ອນອື່ນໝົດ, ການຮັບປະກັນໃຫ້ກອງເລຂາມີຄວາມສາມາດດ້ານວິຊາການແມ່ນສຳຄັນເພື່ອສ້າງການສະໜັບສະໜູນໃນທົ່ວພາກລັດ, ພາກເອກະຊົນ, ສັງຄົມພົນລະເຮືອນ ແລະ ບັນດາຄູ່ຮ່ວມມືສາກົນ. ຄວາມສຳຄັນອັນທີສອງທີ່ຈະຕ້ອງມີຄືບັນດາຕົວແບບທີ່ມີຜົນງານດີເດັ່ນໃນການປະຕິຮູບຢູ່ພາຍໃນພາກເອກະຊົນ, ໂດຍມີການຮ່ວມມືກຮ່ວມງານກັນຢ່າງຈິງຈັງກັບ TPSWG ແລະ ກັບ NIU ແລະຄູ່ຮ່ວມງານຂອງລັດຖະບານອື່ນໆ ໃນແຕ່ລະມື້ລະວັນ. ອັນທີສາມ, ຄວາມໝາຍໝັ້ນທາງດ້ານການເມືອງອັນແຂງແຮງຕໍ່ຈຸດໝາຍພັດທະນາລະດັບສູງໃນລະດັບການນຳຂັ້ນສູງຂອງລັດຖະບານ ຖືເປັນປະເດັນໃຈກາງເພື່ອຮັບປະກັນການຈັດຕັ້ງປະຕິບັດໃຫ້ມີປະສິດທິຜົນ.

ຂີດຄວາມສາມາດຂອງ MOIC ໃນການສະໜັບສະໜູນການປະຕິຮູບດ້ານນະໂຍບາຍ, ລະບຽບການ ແລະ ການຈັດຕັ້ງຄຸ້ມຄອງໄດ້ຮັບການເສີມຂະຫຍາຍໂດຍການໃຫ້ຄຳໝັ້ນສັນຍາຂອງບັນດາຄູ່ຮ່ວມມືສາກົນໃນການເຂົ້າຮ່ວມກອງທຶນສົມທົບຫຼາຍຝ່າຍ MDTFs ຂອງ ສປປ ລາວ. ກອງທຶນໄດ້ຮັບການສ້າງຕັ້ງຂຶ້ນໃນປີ 2008 ແລະສືບຕໍ່ດຳເນີນການເປັນພາຫະນະນຳທາງສຳລັບການຈັດຫາເງິນທຶນໃຫ້ແກ່ການປະຕິຮູບທຸລະກິດ ແລະ ການຄ້າ. ກອງເນື້ອຄວາມຂ້າງລຸ່ມນີ້ສະຫຼຸບສາມ MDTFs. ໂຄງປະກອບການຈັດຕັ້ງຄຸ້ມຄອງສຳລັບວາລະການປະຕິຮູບດ້ານການລົງທຶນ ແລະ ການຄ້າທີ່ສະໜັບສະໜູນໂດຍ MTDF ຍັງຄົງບໍ່ມີການປ່ຽນແປງຕັ້ງແຕ່ປີ 2008. ໂຄງປະກອບການຄຸ້ມຄອງນີ້ໄດ້ເຮັດໃຫ້ລັດຖະບານສາມາດລະດົມແຫຼ່ງທຶນເພີ່ມຂຶ້ນຈາກຫຼາຍໆຜູ້ໃຫ້ທຶນ.

## ກອງເນື້ອຄວາມທີ 1.1: ກອງທຶນສົມທົບຫລາຍຝ່າຍ (MDTF): 2008 – 2022

MDTF I ສ້າງຕັ້ງຂຶ້ນໃນປີ 2008 ເພື່ອຈັດຕັ້ງປະຕິບັດຕາຕະລາງແຜນປະຕິບັດງານລະອຽດ DTIS Action Matrix ສຳບັບທຳອິດດ້ວຍການສະໜອງທຶນເບື້ອງຕົ້ນ 6,8 ລ້ານໂດລາສະຫະລັດ ຈາກທະນາຄານໂລກ, ອົດສະຕຣາລີ ແລະ ສະຫະພາບເອີຣົບ. ຫຼັງຈາກການທົບທວນຄືນກາງສະໄໝ, ເຢຍລະມັນກໍໄດ້ເຂົ້າຮ່ວມ ແລະເພີ່ມເງິນ 0,8 ລ້ານໂດລາສະຫະລັດ ເຊັ່ນກັນ. MDTF I ໄດ້ຖືກຈັດຕັ້ງປະຕິບັດໃນໄລຍະ 2008-2012

MDTF II ລວມມີເງິນທຶນຈາກທະນາຄານໂລກ, EU, ອົດສະຕຣາລີ, ການຊ່ວຍເຫລືອຂອງໄອແລນ/ອັງກິດ, ເຢຍລະມັນ, ແລະ USAID ໃນເບື້ອງຕົ້ນເປັນມູນຄ່າ 14 ລ້ານໂດລາສະຫະລັດ. ພາຍຫຼັງການທົບທວນໄລຍະກາງ, ອົດສະຕຣາລີໄດ້ຈັດສັນເງິນເພີ່ມຕື່ມ 2 ລ້ານໂດລາສະຫະລັດ. MDTF II ໄດ້ຖືກຈັດຕັ້ງປະຕິບັດໃນໄລຍະ 2013-2018.

MDTF III ໄດ້ເລີ່ມຕົ້ນໃນປີ 2019 ດ້ວຍການໃຫ້ທຶນໃນເບື້ອງຕົ້ນ 13 ລ້ານໂດລາຈາກທະນາຄານໂລກ, ອົດສະຕຣາລີ, ສະຫະພາບເອີຣົບ EU, ການຊ່ວຍເຫລືອຂອງໄອແລນ/ອັງກິດ, ເຢຍລະມັນ, ແລະ USAID. ໃນປີ 2021, ພາຍຫຼັງການທົບທວນໄລຍະກາງ, ໂຄງການດັ່ງກ່າວໄດ້ຂະຫຍາຍໄປຮອດປີ 2024 ດ້ວຍມູນຄ່າເພີ່ມຕື່ມ 6,5 ລ້ານ ໂດລາສະຫະລັດ.

TPSWG ສ້າງຕັ້ງຄະນະກຳມະການຊີ້ນຳແຜນງານຈັດຕັ້ງປະຕິບັດໂຄງການ (PEC) ເພື່ອອຳນວຍຄວາມສະດວກໃນການອອກແບບ, ຈັດຕັ້ງປະຕິບັດແຜນງານ ແລະ ໂຄງການທີ່ກ່ຽວຂ້ອງກັບການຄ້າຢູ່ໃນ ສປປ ລາວ. PEC ຍັງເປັນເວທີທີ່ໂປ່ງໃສເພື່ອແລກປ່ຽນຂໍ້ມູນຂ່າວສານກ່ຽວກັບການພັດທະນາ ແລະ ຈັດຕັ້ງປະຕິບັດ AfT. ສະມາຊິກ PEC ລວມມີຜູ້ຕາງໜ້າຈາກທຸກໆອົງການທີ່ເຂົ້າຮ່ວມໃນກອງເລຂາວຽກງານການຄ້າເພື່ອການພັດທະນາ, ຕົວແທນຂອງແຕ່ລະຜູ້ໃຫ້ທຶນທີ່ສະໜອງທຶນໃຫ້ແກ່ໂຄງການທີ່ຄຸ້ມຄອງໂດຍ PEC, ຕົວແທນຈາກ LNCCI ແລະສະມາຄົມພາກເອກະຊົນອື່ນໆ ແລະຜູ້ຕາງໜ້າສັງຄົມພົນລະເຮືອນ. PEC ເລັງໃສ່ການຕັດສິນໃຈແບບສັນທາມະຕິ,[2] ໂດຍຈັດກອງປະຊຸມປະຈຳປີ (ໂດຍພື້ນຖານແລ້ວນີ້ແມ່ນກອງປະຊຸມພິເສດຂອງ TPSWG) ແລະ ມີການພິຈາລະນາເພື່ອໄວ້ໃຫ້ NIU ໄດ້ຍື່ນເອກະສານຕໍ່ປະທານ, ຕາມຄວາມຮຽກຮ້ອງຕ້ອງການເພື່ອໃຫ້ມີການອະນຸມັດແບບເໝືອນຈິງ. ໃນລະຫວ່າງກອງປະຊຸມ, ປະ ທານຈະສະແຫວງຫາຄວາມຄິດເຫັນຈາກຜູ້ໃຫ້ທຶນທີ່ກ່ຽວຂ້ອງ ກ່ອນທີ່ຈະມີຄຳຕັດສິນຊີ້ຂາດ. ເພື່ອຫຼີກເວັ້ນການຊັກຊ້າກ່ອນທີ່ຈະໄດ້ຮັບການອະນຸມັດ, ປະທານດຳເນີນການຕາມຫຼັກການທີ່ວ່າ "ຖ້າມິດຢູ່ຖືວ່າແມ່ນຄວາມເຫັນຊອບ." ການຕັດສິນໃຈ ແລະບົດບັນທຶກກອງປະຊຸມທັງໝົດຂອງ PEC ໄດ້ຖືກເຜີຍແຜ່ຢູ່ໃນເວັບໄຊ T4DLaos.org. NIU ໃຫ້ການສະໜັບສະໜູນດ້ານບໍລິຫານ ແລະ ເລຂານຸການໃຫ້ແກ່ PEC.

2. ແນວໃດກໍ່ຕາມ, ກົດລະບຽບໄດ້ເພື່ອໄວ້ໃຫ້ມີການລົງຄະແນນສຽງ ຖ້າຫາກວ່າບໍ່ສາມາດບັນລຸສັນທາມະຕິ. ຜູ້ໃຫ້ທຶນແຕ່ລະປະເທດມີຄະແນນສຽງດຽວ, ດ້ວຍຈຳນວນຄະແນນສຽງເທົ່າທຽມກັນຈາກລັດຖະບານ. ສຽງສ່ວນໃຫຍ່ແບບງ່າຍດາຍແມ່ນຈຳເປັນສຳລັບການຕັດສິນໃຈ. ໃນກໍລະນີທີ່ມີຄະແນນສະເໝີກັນ, ປະທານ PEC ຈະລົງຄະແນນສຽງຕັດສິນ. ລັດຖະມົນຕີອຸດສາຫະກຳ ແລະ ການຄ້າ ຈະເປັນປະທານ PEC.

## ກ່ອງເນື້ອຄວາມທີ 1.2 ພາລະບົດບາດ ຂອງຄະນະຊີ້ນຳແຜນງານຈັດຕັ້ງປະຕິບັດໂຄງການ (PEC)

- ຮັບປະກັນຄວາມໂປ່ງໃສ ແລະ ການປະສານງານການເຄື່ອນໄຫວວຽກງານການຄ້າເພື່ອການພັດທະນາ (T4D) ໃນ ສປປ ລາວ
- ເຮັດໜ້າທີ່ເປັນອົງການຄຸ້ມຄອງລວມສຳລັບໂຄງການ T4D ທັງໝົດ.
- ຮັດໜ້າທີ່ເປັນຄະນະຊີ້ນຳຂອງບັນດາໂຄງການ T4D ທີ່ສຳຄັນ ແລະ ບັນດາຄະນະຊີ້ນຳໂຄງການອີກຕໍ່ໜຶ່ງ
- ຈັດໃຫ້ມີຂອບຂ່າຍການລາຍງານແບບແຜນງານຮ່ວມກັນ ແລະ ມີກົນໄກຄະນະຊີ້ນຳໃຫ້ບັນດາກຸ່ມທີ່ກ່ຽວຂ້ອງ
- ສ້າງຕັ້ງ ແລະ ຕິດຕາມໂຄງການ T4D ຮ່ວມກັນ ໂດຍມີຂອບຜົນໄດ້ຮັບທີ່ຊັດເຈນ
- ທົບທວນ ແລະ ປັບປຸງ Action Matrix ຂອງບັນດາໂຄງການບຸລິມະສິດ
- ສົນທະນາກ່ຽວກັບຄວາມຕ້ອງການ ຂອງແຜນງານໂຄງການ ແລະບຸລິມະສິດທີ່ກ່ຽວຂ້ອງ, ເຊິ່ງໃນນັ້ນມີ: ການຄຸ້ມຄອງແຜນງານ/ໂຄງການ, ລວມທັງວິທີການທີ່ສອດຄ່ອງ ແລະ ໃຊ້ທົ່ວໄປຕໍ່ກັບຮູບແບບວິທີຈັດຕັ້ງປະຕິບັດ ແລະ ການຄິດໄລ່ງົບປະມານ ຂອງແຜນງານ/ໂຄງການ; ການຕິດຕາມ, ປະເມີນຜົນ ແລະ ການປະເມີນຜົນກະທົບ ຂອງກິດຈະກຳສະໜັບສະໜູນ; ແລະການຄຸ້ມຄອງຂໍ້ມູນຂ່າວສານລວມທັງການຍົກສູງບົດບາດຂອງໂຄງການ.

**ກົນໄກການຕິດຕາມ ແລະ ປະເມີນຜົນ**

ບົດ DTIS ປັບໃໝ່ປີ 2022 ປະກອບມີຮ່າງແຜນດຳເນີນງານການພັດທະນາຂະແໜງການຄ້າ ແລະ ພາກເອກະຊົນຂອງ ສປປ ລາວ ສະບັບປັບປຸງເພື່ອໃຫ້ TPSWG ພິຈາລະນາ ພາຍໃຕ້ຂະບວນການກອງປະຊຸມໂຕະມົນ. ຜົນໄດ້ຮັບໃນການສຶກສາ ຈາກບົດ DTIS ທີ່ປັບປຸງໃນ ປີ 2022 ແມ່ນສ້າງຂຶ້ນຕໍ່ຍອດມາຈາກແຜນດຳເນີນງານທີ່ມີຢູ່ແລ້ວ. ແຜນດຳເນີນງານຂະແໜງການຄ້າ ແລະພາກເອກະຊົນ ເປັນການເຊື່ອມຕໍ່ບັນດາລາຍການກິດຈະກຳທີ່ເປັນບູລິມະສິດກັບຜົນໄດ້ຮັບ ແລະ ຖືກອອກແບບມາເພື່ອໃຫ້ມີການປັບ ປຸງຢ່າງຕໍ່ເນື່ອງ.

ຮ່າງແຜນດຳເນີນງານໄດ້ກຳນົດບັນດາລາຍການວຽກງານທີ່ຈະໄດ້ປະຕິບັດ, ຂໍ້ຈຳກັດທີ່ໄດ້ຈຳແນກອອກ, ຄວາມຮັບຜິດຊອບ ຂອງອົງການຈັດຕັ້ງ ແລະຜູ້ມີສ່ວນກ່ຽວຂ້ອງໃນການຈັດຕັ້ງປະຕິບັດ, ຄວາມຫຍຸ້ງຍາກ, ຜົນຕອບຮັບທີ່ຄາດຫວັງໄວ້ ແລະໄລຍະເວລາໃນການຈັດຕັ້ງປະຕິບັດ ແລະການເຊື່ອມໂຍງ (ຖ້າມີ) ກັບຂໍ້ລິເລີ່ມຂອງແຜນດຳເນີນງານທີ່ມີຢູ່ແລ້ວ. ຮ່າງແຜນດຳເນີນງານດັ່ງກ່າວໄດ້ຈັດວາງເປັນ 2 ຂົງເຂດຜົນທີ່ໄດ້ມາແບບກວ້າງໆ ຄື: ປັບປຸງສະພາບແວດລ້ອມທີ່ເອື້ອອຳນວຍໃຫ້ແກ່ການຄ້າ ແລະ ການດຳເນີນທຸລະກິດ, ຄວາມສາມາດແຂ່ງຂັນທີ່ເພີ່ມຂຶ້ນຂອງຂະແໜງກະສິກຳ, ການທ່ອງທ່ຽວ ແລະ ອຸດສາຫະກຳປຸງແຕ່ງ. ຂົງເຂດຜົນໄດ້ມາເຫຼົ່ານີ້, ເອີ້ນວ່າເປັນເສົາຄ້ຳຂອງແຜນງານ, ເຊິ່ງປະຕິບັດຕາມໂຄງສ້າງດຽວກັນກັບແຜນດຳເນີນງານທີ່ມີຢູ່ແລ້ວ ເຊິ່ງໄດ້ຈັດແບ່ງອອກຢູ່ໃນທາລະດັບ: (i) ເປົ້າຫມາຍການພັດທະນາ; (ii) ຜົນໄດ້ຮັບທາງຍຸດທະສາດ; (iii) ຂົງເຂດຜົນໄດ້ຮັບ (ເສົາຄ້ຳຂອງແຜນງານ); ຂົງເຂດການເຂົ້າແກ້ໄຂບັນຫາ; ແລະ ການແກ້ໄຂບັນຫາ (ລາຍການວຽກທີ່ຈະໄດ້ເຮັດ / ບັນດາກິດຈະກຳການເຄື່ອນໄຫວ).

ສາມລະດັບທຳອິດກ່ຽວຂ້ອງກັບຜົນກະທົບຂອງວິທີການຂອງແຜນງານໂຄງການໂດຍລວມ; ຕົວຊີ້ວັດກ່ຽວກັບລະດັບເຫຼົ່ານີ້ແມ່ນໄດ້ວັດແທກປະຈຳປີສຳລັບເປົ້າຫມາຍການພັດທະນາ ແລະ ສອງຄັ້ງຕໍ່ປີສຳລັບຜົນໄດ້ຮັບຍຸດທະສາດ ແລະລະດັບເສົາຄ້ຳ. ຍ້ອນວ່າສິ່ງເຫຼົ່ານີ້ຖືກກຳນົດໂດຍ GOL, ຈຶ່ງຖືວ່າມັນຢູ່ນອກໄປຈາກຂະບວນການຂອງ DTIS. ຕົວຊີ້ວັດສຳລັບບັນດາລະດັບເຫຼົ່ານີ້ແມ່ນສະແດງຢູ່ໃນຕາຕະລາງ 2 ຂ້າງລຸ່ມນີ້. ລະດັບທີ 4 ແລະທີ 5 ແມ່ນເພື່ອແກ້ໄຂບັນດາຂົງເຂດແບບກວ້າງໆ ແລະ ບັນດາກິດຈະກຳສະເພາະໃນການແກ້ໄຂບັນຫາພາຍໃຕ້ແຕ່ລະຂົງເຂດຜົນໄດ້ຮັບຂອງໃຜຂອງມັນ ແລະສະແດງໄວ້ຢູ່ໃນຕາຕະລາງ 3 ແລະ 4 ຕາມລຳດັບ. ບັນດາກິດຈະກຳສະເພາະໂດຍທົ່ວໄປຫມາຍເຖິງໂຄງການສະເພາະທີ່ຈະໄດ້ຮັບການພັດທະນາຂຶ້ນໂດຍລັດຖະບານ ແລະ ຄູ່ຮ່ວມພັດທະນາສາກົນທີ່ມີທ່າແຮງ (DPs). ບັນດາຕົວຊີ້ວັດໃນລະດັບການແກ້ໄຂບັນຫາຈະເປັນອັນສະເພາະຂອງໂຄງການ ແລະ ຈະຖືກພັດທະນາຂຶ້ນໃນລະຫວ່າງການອອກແບບໂຄງການ.

## ຕາຕະລາງ 1.2 ວິທີການລວມ ຂອງແຜນງານໂຄງການ: ແຜນດຳເນີນງານການພັດທະນາຂະແໜງການຄ້າ ແລະເອກະຊົນ (ຂອບຜົນໄດ້ຮັບ)

| ລະດັບ | ຜົນໄດ້ຮັບ | ຕົວຊີ້ວັດ |
|---|---|---|
| | ການເຕີບໂຕໂດຍອີງໃສ່ຖານອັນກວ້າງຂວາງ, ແບບຍືນຍົງ ແລະ ສາມາດປັບຄືນສູ່ສະພາບເກົ່າໄດ້ເມື່ອຖືກກະທົບ | - ອັດຕາການເຕີບໂຕ GDP<br>- ການກະຈາຍຄວາມຮັ່ງມີ<br>- ອັດຕາສ່ວນຮ້ອຍຂອງປະຊາຊົນທີ່ດຳລົງຊີວິດຕ່ຳກວ່າເສັ້ນຄວາມທຸກຍາກ<br>- ການກະຈາຍຄວາມທຸກຍາກຕາມພາກ<br>- ດັດຊະນີຄວາມບໍ່ສະເໝີພາບລະຫວ່າງຍິງ-ຊາຍ<br>- ດັດຊະນີການພັດທະນາ ຫຼື ດັດຊະນີການພັດທະນາມະນຸດໂດຍໄດ້ປັບຕາມລະດັບຄວາມບໍ່ສະເໝີພາບໃນໝູ່ປະຊາກອນ<br>- ອັດຕາການວ່າງງານ<br>- ການຂະຫຍາຍຕົວຂອງການຈ້າງງານໃນຂະແໜງການອຸດສາຫະກຳ ແລະ ການບໍລິການຕົ້ນຕໍ (ເອເລັກໂຕຣນິກ, ເຄື່ອງນຸ່ງຫົ່ມ, ທຸລະກິດກະສິກຳ, ການທ່ອງທ່ຽວ) |
| | ການຫລຸດພົ້ນຈາກສະຖານະພາບປະເທດດ້ອຍພັດທະນາ | - ລາຍໄດ້ຕໍ່ຫົວຄົນ (GNI ຕໍ່ຫົວຄົນ)<br>- ການຫຼຸດຜ່ອນຄວາມບອບບາງທາງດ້ານເສດຖະກິດ (ດັດຊະນີຄວາມບອບບາງທາງດ້ານເສດຖະກິດ) |
| ຜົນໄດ້ຮັບທາງດ້ານຍຸດທະສາດ | ການພັດທະນາແບບຍືນຍົງທາງດ້ານການຄ້າ ແລະ ທຸລະກິດ ສຳລັບການຫຼຸດຜ່ອນຄວາມທຸກຍາກ ແລະ ການຫລຸດພົ້ນຈາກສະຖານະພາບປະເທດດ້ອຍພັດທະນາ LDC ໂດຍການມີເສດຖະກິດທີ່ທັນສະໄໝ, ມີຄວາມຫຼາກຫຼາຍ | - ດັດຊະນີການກະຈຸກຕົວຂອງການສົ່ງອອກ<br>- ອັດຕາການເຕີບໂຕປະຈຳປີຂອງມູນຄ່າການສົ່ງອອກທີ່ບໍ່ແມ່ນຊັບພະຍາກອນ<br>- ການຂະຫຍາຍຕົວທີ່ແທ້ຈິງຂອງລວມຍອດການຄ້າສິນຄ້າ ແລະ ການບໍລິການ<br>- ມູນຄ່າການສົ່ງອອກສິນຄ້າທີ່ບໍ່ແມ່ນຊັບພະຍາກອນທຳມະຊາດ<br>- ມູນຄ່າການຄ້າການບໍລິການ<br>- ອັດຕາການເຕີບໂຕສະເລ່ຍປະຈຳປີຂອງຈຳນວນວິສາຫະກິດໃໝ່ທີ່ລົງທະບຽນໃນຂະແໜງການຕົ້ນຕໍ, ແບ່ງຕາມເພດແລະແຂວງ<br>- ການເພີ່ມຂຶ້ນຂອງການລົງທຶນທີ່ຄຸ້ມຄອງໂດຍ MOIC (ການລົງທຶນພາຍໃນແລະການລົງທຶນໂດຍກົງຈາກຕ່າງປະເທດ (FDI)) |
| ເສົາຄ້ຳ (ຂົງເຂດຜົນໄດ້ຮັບ) | 1. ດ້ມີການເສີມຄວາມເຂັ້ມແຂງທາງດ້ານສະພາບແວດລ້ອມດ້ານການຄ້າ ແລະ ການລົງທຶນ: ນະໂຍບາຍການຄ້າ, ການອຳນວຍຄວາມສະດວກທາງດ້ານການຄ້າ, ການປະເມີນຜົນກະທົບດ້ານລະບຽບການ.<br>2. ຄວາມສາມາດໃນການແຂ່ງຂັນໄດ້ຮັບການປັບປຸງໃນຂະແໜງກະສິກຳ, ການທ່ອງທ່ຽວ ແລະ ອຸດສາຫະກຳປຸງແຕ່ງ | - ອັດຕາສ່ວນການເປີດກວ້າງທາງການຄ້າ (ສ່ວນແບ່ງການຄ້າໃນ GDP ເປັນສ່ວນຮ້ອຍ)<br>- ການເພີ່ມຂຶ້ນ ຂອງທຸລະກິດໃໝ່<br>- ການຫຼຸດຜ່ອນການປະຕິບັດຕາມລະບຽບການທາງດ້ານທຸລະກິດ<br>- ການຫຼຸດຜ່ອນເວລາ ແລະຄ່າໃຊ້ຈ່າຍໃນການເລີ່ມຕົ້ນທຸລະກິດ<br>- ການຫຼຸດຜ່ອນເວລາ ແລະຄ່າໃຊ້ຈ່າຍໃນດ້ານການຄ້າຂ້າມຊາຍແດນ<br>- ການຫຼຸດຜ່ອນເວລາທີ່ຜູ້ບໍລິຫານລະດັບສູງໃຊ້ເວລາເຮັດຕາມຂະບວນການຂອງລະບຽບການຂອງລັດຖະບານ<br>- ອັດຕາສ່ວນຮ້ອຍຂອງການຄ້າທີ່ເກີດຂຶ້ນພາຍໃຕ້ສັນຍາທີ່ໃຫ້ສິດທິພິເສດທາງການຄ້າ<br>- ການມີສ່ວນຮ່ວມຂອງແມ່ຍິງໃນເສດຖະກິດ<br>- ຈຳນວນ ແລະ ການໃຊ້ຈ່າຍສະເລ່ຍ ຂອງນັກທ່ອງທ່ຽວຕ່າງປະເທດເພີ່ມຂຶ້ນ<br>- ການເຕີບໂຕທີ່ແທ້ຈິງຕໍ່ປີ ຂອງຜະລິດຕະພາບ<br>- ການຂະຫຍາຍຕົວຂອງການລົງທຶນໃນຂະແໜງການທີ່ໄດ້ເລືອກສັນ<br>- ການຂະຫຍາຍຕົວຕໍ່ປີທີ່ແທ້ຈິງ ຂອງການຈ້າງງານ<br>• ອັດຕາຄວາມຢູ່ລອດເພີ່ມຂຶ້ນສຳລັບຜະລິດຕະພັນ-ຈຸດໝາຍປາຍທາງ-ຕະຫຼາດ-ການປະສົມປະສານຜະລິດຕະພັນທີ່ມີຢູ່ແລ້ວ ແລະ ອັນໃໝ່ |

ຂົງເຂດການແກ້ໄຂບັນຫາໃນວົງກວ້າງ ແລະ ກິດຈະກຳສະເພາະທີ່ສະເໜີອອກມາເພື່ອໃຫ້ປັບປຸງແຜນດຳເນີນງານຂະແໜງການຄ້າ ແລະ ພາກເອກະຊົນ ແມ່ນສະແດງໄວ້ຢູ່ໃນຕາຕະລາງ 3 ແລະ 4.

## ຕາຕະລາງ 1.3 ຂອບຂ່າຍ ຂອງ M&E ເສົາຄ້ຳທີ 1: ສະພາບແວດລ້ອມດ້ານການຄ້າ ແລະ ການລົງທຶນໄດ້ມີການເສີມຄວາມເຂັ້ມແຂງ

| # | ການແກ້ໄຂບັນຫາ/ກິດຈະກຳທີ່ໄດ້ສະເໜີຂຶ້ນ | ອົງການ | ໂຄງການທີ່ມີ/ທີ່ໄດ້ຖືກນຳສະເໜີ |
|---|---|---|---|
| ການປັບປຸງສະພາບແວດລ້ອມທີ່ເອື້ອອຳນວຍແກ່ການເຮັດທຸລະກິດ | | | |
| 1 | ຫລຸດຜ່ອນຂັ້ນຕອນການອອກໃບອະນຸຍາດດຳເນີນທຸລະກິດ ແລະ ອະນຸຍາດການລົງທຶນ-ຈັດຕັ້ງປະຕິບັດການຂຶ້ນທະບຽນວິສາຫະກິດໂດຍທາງອອນລາຍ | MIC, MOIC, ອົງການອື່ນທີ່ກ່ຽວຂ້ອງ | ໂຄງການສົ່ງເສີມຄວາມສາມາດໃນການແຂ່ງຂັນ ແລະ ການຄ້າ ຂອງ ສປປ ລາວ (CTP) |
| 2 | ປັບປຸງຂີດຄວາມສາມາດ ຂອງສະມາຄົມທຸລະກິດ | MOIC ແລະ MHA | |
| 3 | ທົບທວນເຄື່ອງມືນະໂຍບາຍທາງດ້ານການລົງທຶນເພື່ອຮັບປະກັນຄວາມສອດຄ່ອງກັບເປົ້າໝາຍການລົງທຶນຂອງ GOL (ການເພີ່ມຄວາມຫຼາກຫຼາຍ ແລະ ການເຊື່ອມໂຍງຢູ່ພາຍໃນລະບົບເສດຖະກິດຫຼາຍຂຶ້ນ) | MIC | ໂຄງການປັບປຸງບັນຍາກາດການລົງທຶນຂອງ IFC |
| 4 | ປະຕິຮູບກົດໝາຍສົ່ງເສີມການລົງທຶນ (2016) | MPI | |
| 5 | ເຂົ້າຮ່ວມສູນສາກົນເພື່ອການແກ້ໄຂຂໍ້ຂັດແຍ່ງດ້ານ ການລົງທຶນ (ICSID) | GOL/MPI | |
| 6 | ລົບລ້າງຂໍ້ຈຳກັດການເຂົ້າສູ່ຕະຫລາດໃນຂະແໜງ ການບໍລິການທີ່ສຳຄັນ (ໂລຊິດສະຕິກ, ການຂົນສົ່ງ) ເພື່ອສົ່ງເສີມການແຂ່ງຂັນແລະປະສິດທິພາບ | MOIC/MPI/ບັນດາກະຊວງສາຍຕັ້ງ | ໂຄງການ Arise Plus ລາວ, ໂຄງການສົ່ງເສີມສະພາບແວດລ້ອມທາງດ້ານທຸລະກິດຂອງລາວ (LBE) |
| 7 | ເພີ່ມທະວີການສື່ສານແລະການຂະຫຍາຍຂອບເຂດໃຫ້ກວ້າງອອກ, ສ້າງຄວາມເຂັ້ມແຂງໃຫ້ແກ່ການເຂົ້າເຖິງນະໂຍບາຍ ແລະ ລະບຽບການໆຄ້າ ແລະ ທຸລະກິດ | MOIC ແລະ ບັນດາກະຊວງສາຍຕັ້ງທີ່ກ່ຽວຂ້ອງ | ໂຄງການສົ່ງເສີມຄວາມສາ ມາດໃນການແຂ່ງຂັນ ແລະ ການຄ້າ ຂອງ ສປປ ລາວ (CTP), ໂຄງການສົ່ງເສີມສະ ພາບແວດລ້ອມທາງດ້ານທຸລະກິດຂອງລາວ (LBE), ໂຄງ ການ Arise Plus ຂອງລາວ |
| ບັນດານະໂຍບາຍການຄ້າ ແລະ ການອຳນວຍຄວາມສະດວກທາງດ້ານການຄ້າ | | | |
| 8 | ເປີດເສລີນະໂຍບາຍການຄ້າ | MOF/MOIC/MIC | ໂຄງການສົ່ງເສີມຄວາມສາ ມາດໃນການແຂ່ງຂັນ ແລະ ການຄ້າຂອງ ສປປ ລາວ (CTP), ໂຄງການສົ່ງເສີມສະ ພາບແວດລ້ອມທາງດ້ານທຸລະກິດ ຂອງລາວ (LBE), ໂຄງ ການ Arise Plus ຂອງລາວ |
| 9 | ຈັດຕັ້ງປະຕິບັດແຜນດຳເນີນງານແຫ່ງຊາດດ້ານການອຳນວຍຄວາມສະດວກທາງດ້ານການຄ້າ | MOIC/ລັດຖະການພາສີ/ບັນດາກະຊວງສາຍຕັ້ງທີ່ກ່ຽວຂ້ອງ | ໂຄງການສົ່ງເສີມຄວາມສາ ມາດໃນການແຂ່ງຂັນ ແລະ ການຄ້າຂອງ ສປປ ລາວ (CTP) |
| 10 | ທົບທວນມາດຕະການກີດກັນການຄ້າທີ່ບໍ່ແມ່ນພາສີ (NTM) – ການປະເມີນຜົນກະທົບທາງດ້ານລະບຽບການ | NTFC ເປັນຜູ້ນຳພາບຸ່ນ ດາກະຊວງຕ່າງໆ | ໂຄງການສົ່ງເສີມຄວາມສາ ມາດໃນການແຂ່ງຂັນ ແລະ ການຄ້າ ຂອງ ສປປ ລາວ (CTP) |

## ຕາຕະລາງ 1.4 ຂອບຂ່າຍ M&E ເສົາຄ້ຳທີ 2: ຄວາມສາມາດໃນການແຂ່ງຂັນໃນຂະແໜງກະສິກຳ, ການທ່ອງທ່ຽວ ແລະ ອຸດສາຫະກຳປຸງແຕ່ງ ໄດ້ຮັບການປັບປຸງ

| # | ການແກ້ໄຂບັນຫາ/ກິດຈະກຳທີ່ໄດ້ສະເໜີຂຶ້ນ | ອົງການ | ໂຄງການທີ່ມີ/ທີ່ໄດ້ຖືກນຳສະເໜີ |
|---|---|---|---|
| | ສະເພາະຂະແໜງການ: ກະສິກຳ | | |
| 1 | ເຮັດໃຫ້ລະບຽບການດ້ານວັດຖຸປະກອນຮັບໃຊ້ກະສິກຳ ມີຄວາມກະທັດຮັດງ່າຍດາຍ | MAFF/DOLF | ໂຄງການຜະລິດ ກະສິກຳ ເປັນ ສິນຄ້າ ຢູ່ ສປປລາວ: (LACP) – ທຶນສົມທົບ ເພື່ອສົ່ງເສີມທຸລະກິດກະສິກຳ (AVCF) |
| 2 | ຍົກເລີກບັນຊີລາຍການລາຄາຕ່ຳສຸດແລະສູງສຸດຂອງ ຜະລິດຕະພັນສິນຄ້າກະສິກຳ | MOF/MOIC/ MAFF/DOLF | |
| 3 | ສ້າງເວທີຂໍ້ມູນຂ່າວສານອອນລາຍທີ່ໃຊ້ໄດ້ໃນໂທລະ ສັບມືຖື | MAFF | ໂຄງການຂະແໜງຕ່ອງໂສ້ມູນຄ່າທຸລະກິດກະສິກຳທີ່ເປັນມິດກັບດິນຟ້າອາກາດ |
| 4 | ຊຸກຍູ້ການພັດທະນາລະບົບສາງເຢັນສຳລັບພືດຜັກ | MAFF | ໂຄງການຜະລິດ ກະສິກຳ ເປັນ ສິນຄ້າ ຢູ່ ສປປລາວ (LACP) – ທຶນສົມທົບ ເພື່ອສົ່ງເສີມທຸລະກິດກະສິກຳ (AVCF), ໂຄງການຂະ ແໜງຕ່ອງໂສ້ມູນຄ່າທຸລະກິດ ກະສິກຳທີ່ເປັນມິດກັບດິນຟ້າອາກາດ. |
| | ສະເພາະຂະແໜງການ: ການທ່ອງທ່ຽວ | | |
| 5 | ສ້າງຕັ້ງສະພາການຕະຫລາດການທ່ອງທ່ຽວ | MOICT/MOIC | ໂຄງການສົ່ງເສີມສະພາບແວດ ລ້ອມທາງດ້ານທຸລະກິດ ຂອງລາວ (LBE), |
| 6 | ຫລຸດຜ່ອນຂັ້ນຂອດດ້ານລະບຽບການໃນຂະແໜງ ການທ່ອງທ່ຽວ | MOICT | |
| 7 | ຈັດຕັ້ງປະຕິບັດບັນດາມາດຕະການ ນະໂຍບາຍປົກປັກຮັກສາສິ່ງແວດລ້ອມ ເພື່ອຊຸກຍູ້ສົ່ງເສີມການທ່ອງ ທ່ຽວທຳມະຊາດ | MOICT/MOE | |
| 8 | ເພີ່ມທະວີການຝຶກອົບຮົມດ້ານການທ່ອງທ່ຽວ ແລະ ການໂຮງແຮມ | MOICT/MOE | |
| | ສະເພາະຂະແໜງການ: ອຸດສາຫະກຳປຸງແຕ່ງ | | |
| 9 | ປັບປຸງສະພາບແວດລ້ອມທີ່ເອື້ອອຳນວຍໃຫ້ແກ່ທຸລະກິດ (#1.1) | ໃຫ້ເບິ່ງ 1.1 | ໂຄງການສົ່ງເສີມຄວາມສາມາດໃນການແຂ່ງຂັນ ແລະການຄ້າຂອງ ສປປ ລາວ (CTP) |
| 10 | ເຂດເສດຖະກິດພິເສດ – ຫລຸດຜ່ອນຂັ້ນຕອນໃຫ້ກະ ທັດຮັດງ່າຍດາຍ – ຮຽນຮູ້ຈາກທຳນຽມປະຕິບັດທີ່ນຳໜ້າຂອງໂລກ | MIC/MOIC | |
| | ຄວາມສາມາດການແຂ່ງຂັນ ລະດັບວິສາຫະກິດ | | |
| 11 | ເສີມຂະຫຍາຍຂີດຄວາມສາມາດ ແລະ ຄວາມຮູ້ດ້ານວິທີການດຳເນີນທຸລະກິດ ຂອງ SME | MOIC/NIU | ໂຄງການສົ່ງເສີມຄວາມສາ ມາດໃນການແຂ່ງຂັນ ແລະ ການຄ້າຂອງ ສປປ ລາວ (CTP), ໂຄງການຟື້ນຟູ ແລະ ສະໜັບສະໜູນການເຂົ້າເຖິງການຊ່ວຍເຫຼືອດ້ານການເງິນແບບສຸກເສີນ ສຳ ລັບຈຸລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ທີ່ສົ່ງເສີມການສົ່ງອອກ ແລະ ການສ້າງວຽກເຮັດງານທຳໃນດ້ານແຜນແພພື້ນບ້ານ |

## ຕາຕະລາງ 1.5 ແຜນດຳເນີນງານຂອງຂະແໜງການຄ້າ ແລະພາກທຸລະກິດເອກະຊົນໃນຮ່າງບົດ DTIS ທີ່ໄດ້ປັບປຸງໃໝ່ສະບັບປັດຈຸບັນ ປີ 2022

| ລ/ດ | ກິດຈະກຳ | ຂໍ້ຈຳກັດທີ່ ໄຈ້ອອກໄດ້ ຄວາມຄິດລິເລີ່ມປັດຈຸບັນ | ຄວາມຮັບຜິດຊອບ | ຄວາມຫຍຸ້ງຍາກ, ປັດໄຈທີ່ເຮັດໃຫ້ ສະຫລຸບໄດ, ແລະ ຂອບເວລາຂອງບຸລິມະສິດ | |
|---|---|---|---|---|---|
| ປັບປຸງສະພາບແວດລ້ອມທີ່ເອື້ອອຳນວຍແກ່ການດຳເນີນທຸລະກິດ | | | | | |
| 1 | ປັບປຸງຂັ້ນຕອນການອອກໃບອະນຸຍາດດຳເນີນທຸລະກິດ ແລະການລົງທຶນ -ຈັດຕັ້ງປະຕິບັດການຂຶ້ນທະບຽນທຸລະກິດຜ່ານເວັບອອນລາຍ | ຂະບວນການຫຼາຍອັນ, ຄວາມຕ້ອງການຂໍ້ມູນທີ່ຊໍ້າກັນ ໃນອົງການຕ່າງໆ. ຂາດຄວາມຊັດເຈນກ່ຽວກັບຄວາມຮຽກຮ້ອງຕ້ອງການດ້ານເອກະສານ. | MIC, MOIC ແລະ ກະຊວງສາຍຕັ້ງອື່ນໆ | M/H/M | ໂຄງການສົ່ງເສີມຄວາມສາມາດແຂ່ງຂັນ ແລະ ການຄ້າຂອງ ສປປ ລາວ (CTP), ເສົາຄໍ້າ A |
| 2 | ປັບປຸງຂີດຄວາມອາດສາມາດຂອງສະມາຄົມທຸລະກິດ | ຄົນຕ່າງປະເທດຖືກຈຳກັດບໍ່ໃຫ້ເປັນຕົວແທນຂອງບໍລິສັດ/ອົງການຈັດຕັ້ງຂອງເຂົາເຈົ້າຢູ່ໃນສະມາຄົມທຸລະກິດ | MOIC ແລະ MHA | M/M/S | ປະເດັນບຸລິມະສິດ ຂອງ LBF ກໍລະກິດ 2021 |
| 3 | ທົບທວນເຄື່ອງມືນະໂຍບາຍສົ່ງເສີມການລົງທຶນເພື່ອຮັບປະກັນຄວາມສອດຄ່ອງກັບເປົ້າໝາຍການລົງທຶນຂອງ GOL (ການເພີ່ມຄວາມຫຼາກຫຼາຍ ແລະ ການຕິດພັນກັນໃນດ້ານເສດຖະກິດຫຼາຍຂຶ້ນ) | ການອາໄສ ການງົດເກັບອາກອນແບບມີໄລຍະເວລາແລະການຍົກເວັ້ນພາສີ/ອາກອນຍັງເປັນບັນຫາ. | MIC | M/H/M | |
| 4 | ປະຕິຮູບກົດໝາຍສົ່ງເສີມການລົງທຶນ (2016) | ຂາດຄວາມໂປ່ງໃສ, ຄວາມສາມາດຄາດເດົາໄດ, ຂະບວນການອະນຸມັດທີ່ແກ່ຍາວ | MIC | L/H/S | |
| 5 | ເຂົ້າຮ່ວມເປັນສະມາຊິກຂອງສູນແກ້ໄຂຂໍ້ຂັດແຍ່ງດ້ານການລົງທຶນ ສາກົນ (ICSID) | ຂະບວນການທາງກົດໝາຍຊ້າແລະບໍ່ແນ່ນອນ | GOL/MIC | L/M/S | |
| 6 | ລົບລ້າງຂໍ້ຈຳກັດການເຂົ້າມາເຮັດທຸລະກິດໃນຂະແໜງການບໍລິການທີ່ສຳຄັນ (ໂລຊິດສະຕິກ, ການຂົນສົ່ງ) ເພື່ອສົ່ງເສີມການແຂ່ງຂັນແລະປະສິດທິພາບ | ຂອບເຂດທີ່ຈຳກັດຂອງການບໍລິການສະໜັບສະໜູນທີ່ມີຢູ່ສົ່ງຜົນກະທົບທາງລົບຕໍ່ຄວາມສາມາດແຂ່ງຂັນລວມ | MOIC/MIC | H/H/M | |
| 7 | ເພີ່ມການສື່ສານແລະການເຜີຍແຜ່ໃຫ້ທົ່ວເຖິງ, ເສີມສ້າງການມີນະໂຍບາຍແລະລະບຽບການທຸລະກິດແລະການຄ້າ | ຄວາມຮັບຮູ້ທີ່ຈຳກັດດ້ານນະໂຍບາຍທຸລະກິດ ແລະ ການຄ້າໃນທົ່ວພາກເອກະຊົນ ແລະ ໃນບັນດາອົງການຈັດຕັ້ງປະຕິບັດຂັ້ນແຂວງ ແລະ ເມືອງ | MOIC ແລະ ບັນດາກະຊວງສາຍຕັ້ງ | H/H/M | TIC, ການສະໜັບສະໜູນສູນຂໍ້ມູນຂ່າວສານການຄ້າແຫ່ງຊາດ ແລະ ສູນອອນລາຍອື່ນໆ |

| | | | | | |
|---|---|---|---|---|---|
| ການອຳນວຍຄວາມສະດວກດ້ານການຄ້າ | | | | | |
| 9 | ຈັດຕັ້ງປະຕິບັດແຜນດຳເນີນງານການອຳນວຍສະດວກດ້ານການຄ້າ | ບັນດາມາດຕະການທີ່ມີຫຼາຍໆຢ່າງເພື່ອອຳນວຍຄວາມສະດວກດ້ານການຄ້າລວມທັງ AEO, PCA, ຂອບການຮ່ວມຄຸ້ມຄອງຄວາມສ່ຽງ ແບບເປັນເອກະພາບອັນດຽວ (JRMF), ການປ່ອຍເຄື່ອງອອກກ່ອນ ແລະ ການຜ່ານແດນ ແລະ ລະບົບແຈ້ງເສຍພາສີປະຕູດຽວແຫ່ງຊາດບໍ່ທັນມີການດຳເນີນງານເປັນຜົນເຮັດໃຫ້ເກີດມີຕົ້ນທຶນແກ່ການຄ້າເພີ່ມຂຶ້ນ | MOIC/ ລັດຖະການພາສີ/ ບັນດາກະຊວງ ສາຍຕັ້ງ | H/M/M | TIC, |
| 10 | ທົບທວນບັນດາມາດຕະການທີ່ບໍ່ແມ່ນພາສີ (NTM)- ການປະເມີນຜົນກະທົບຂອງລະບຽບການ | ຫລາຍມາດຕະການ NTM ເປັນການເພີ່ມຕົ້ນທຶນໃຫ້ການຄ້າ | ຫລາຍກະຊວງ | H/M/L | TIC |
| ສະເພາະຂະແໜງການ: ກະສິກຳ | | | | | |
| 11 | ເຮັດໃຫ້ລະບຽບການສຳລັບວັດຖຸປະກອບຮັບໃຊ້ກະສິກຳມີຄວາມກະທັດຮັດງ່າຍດາຍ | ການຂາດຄວາມໂປ່ງໃສແລະ ການປັບໃຫ້ສອດຄ່ອງກັນກັບບັນດາຄູ່ຄ້າຕົ້ນຕໍ | MAFF/DOLF | H/H/M | |
| 12 | ລົບລ້າງບັນຊີລາຍການລາຄາຕ່ຳສຸດ ແລະ ສູງສຸດສຳລັບຜະລິດຕະພັນສິນຄ້າກະສິກຳ | ການຈຳກັດຮັດແຄບດ້ານລາຄາເຮັດໃຫ້ການລົງທຶນບໍ່ຂະຫຍາຍໃນຂອດປຸງແຕ່ງເປັນຜະລິດພັນສຳເລັດຮູບແລ້ວຂາຍ | MOF/MOIC/ MAFF/DOLF | M/M/M | |
| 13 | ສ້າງເວທີໃຫ້ຂໍ້ມູນຂ່າວສານອອນລາຍທີ່ໃຊ້ໄດ້ກັບມືຖື | ຄວາມຈຳເປັນທີ່ຕ້ອງມີຂໍ້ມູນຂ່າວສານດ້ານລາຄາໃຫ້ພ້ອມທີ່ຈະສະໜອງ | MAFF | L/H/M | |
| 14 | ຊຸກຍູ້ສົ່ງເສີມການພັດທະນາສາງເຢັນສຳລັບໃສ່ພືດຜັກ | ຈຳກັດຂະໜາດຕະຫລາດ ແລະ ຮັດແຄບການລົງທຶນ | MAFF | L/H/M | |
| ສະເພາະຂະແໜງການ: ການທ່ອງທ່ຽວ | | | | | |
| 15 | ສ້າງຕັ້ງສະພາການຕະຫລາດການທ່ອງທ່ຽວ | ຂາດເອກະສານສື່ສິ່ງພິມທາງການຕະຫລາດທີ່ດຶງດູດຄວາມສົນໃຈຂອງປວງຊົນ | MOICT/MOIC | M/H/M | ກຳລັງດຳເນີນການ |
| 16 | ປັບປຸງໃຫ້ຂອບລະບຽບການຂອງການທອງທ່ຽວມີຄວາມກະທັດຮັດງ່າຍດາຍ | ຄວາມຮຽກຮ້ອງຕ້ອງການໃຫ້ມີໃບອະນຸຍາດທີ່ສິ້ນເປືອງເວລາ ແລະ ຫຍຸ້ງເຫຍີງ | MOICT | M/H/M | |
| 17 | ປະຕິບັດບັນດາມາດຕະການດ້ານນະໂຍບາຍສຳລັບການປົກປັກຮັກສາສິ່ງແວດລ້ອມ ເພື່ອຊຸກຍູ້ການທ່ອງທ່ຽວທຳມະຊາດ | ການທ່ອງທ່ຽວສ່ວນຫຼາຍແມ່ນສຸມຢູ່ໃນແຂວງຫຼວງພະບາງ ແລະ ນະຄອນຫຼວງວຽງຈັນ | MOICT/MOF | M/H/L | |

| | | | | | |
|---|---|---|---|---|---|
| 18 | ເພີ່ມການຝຶກອົບຮົມຂະແໜງການໂຮງແຮມ-ຮ້ານອາຫານ-ບັນເທີງ-ສະຖານບໍລິການອື່ນ ແລະການທ່ອງທ່ຽວ | ການເຕີບໂຕແມ່ນຖືກຈຳກັດໂດຍການຂາດແຄນຊັບພະຍາກອນມະນຸດ | MOICT/MOE | L/H/L | |
| ສະເພາະຂະແໜງການ: ອຸດສາຫະກຳປຸງແຕ່ງ | | | | | |
| 19 | ປັບປຸງສະພາບແວດລ້ອມທີ່ເອື້ອອຳນວຍໃຫ້ທຸລະກິດ (ເບິ່ງລາຍການກິດຈະກຳ #1) | ສະພາບແວດລ້ອມທີ່ຫຍຸ້ງຍາກໃຫ້ແກ່ທຸລະກິດ | ເບິ່ງ ຂໍ້ 1 | | |
| 20 | ເຂດເສດຖະກິດພິເສດ - ປັບປຸງຂັ້ນຕອນໃຫ້ງ່າຍຂຶ້ນ - ຮຽນຮູ້ຈາກປະເພນີປະຕິບັດຊັ້ນນຳຂອງໂລກ | ລະບຽບວິທີປະຕິບັດທີ່ມີຢູ່ແມ່ນສັບສົນ, ຂາດຄວາມໂປ່ງໃສ. ນະໂຍບາຍສິ່ງເສີມທີ່ມີຢູ່ - ການງົດເກັບອາກອນແບບມີໄລຍະເວລາ ຊຸກຍູ້ສິ່ງເສີມໃຫ້ມີການລົງທຶນທີ່ເຄື່ອນໄປເຄື່ອນມາໃນລະດັບສູງ. | MIC/MOIC | M/M/M | |
| ຄວາມສາມາດແຂ່ງຂັນລະດັບບໍລິສັດ | | | | | |
| 21 | ເສີມສ້າງຂີດຄວາມສາມາດ ແລະ ໂນຮາວ(ການຮູ້ເຮັດ) ຂອງ SME | ຊ່ອງວ່າງດ້ານຄວາມຮູ້ໃນການຜະລິດ, ການຕັ້ງຊື່ຍີ່ຫໍ້ ແລະ ການຕະຫລາດ, ໄອຊີທີ (ICT) ແລະ ການບໍລິຫານຈັດການ | MOIC/NIU | L/H/M | **ສືບຕໍ່ ແລະ ຂະຫຍາຍ** |

ໝາຍເຫດ: ຄວາມຫຍຸ້ງຍາກ, ປັດໄຈທີ່ເຮັດໃຫ້ ສະຫລຸບໄດ້, ສູງ (H), ກາງ (M), ຕໍ່າ (L). ຂອບເວລາ ໄລຍະຍາວ (L), ກາງ (M), ສັ້ນ (S). S = 1 ປີ, M = ບໍ່ກາຍ 5 ປີ, L = ຫລາຍກວ່າ 5 ປີ.

# ບົດທີ1: ບົດເປີດຫົວເລື່ອງ

1. **ບົດວິໄຈການເຊື່ອມໂຍງເຂົ້າສາກົນດ້ານການຄ້າ (DTIS) ສະບັບປັບປຸງແມ່ນເນັ້ນໃສ່ຂໍ້ຈຳກັດດ້ານການຄ້າທີ່ເຮັດໃຫ້ການເຕີບໂຕຂອງ ສປປ ລາວ ຊາລົງ, ຖວງດຶງຄວາມຫຼາກຫຼາຍທາງດ້ານເສດຖະກິດ ແລະ ຈຳກັດການຄ້າກັບພາກພື້ນ ແລະ ກັບໂລກ.** ຈຸດປະສົງຕົ້ນຕໍຂອງການປັບປຸງ DTIS ແມ່ນເພື່ອ: (i) ທົບທວນຄືນຄວາມຄືບໜ້າໃນການຈັດຕັ້ງປະຕິບັດຂໍ້ສະເໜີແນະຈາກບົດວິໄຈການເຊື່ອມໂຍງເຂົ້າສາກົນດ້ານການຄ້າ ປີ 2012 (ເອີ້ນວ່າແຜນດຳເນີນງານການພັດທະນາຂະແໜງການຄ້າ ແລະພາກເອກະຊົນ ປີ 2012; (ii) ຕື່ມເສີມແລະເຮັດໃຫ້ມີການວິເຄາະເລິກເຂົ້າໃນຂົງເຂດທີ່ໄດ້ເລືອກເຟັ້ນເອົາ, ໂດຍຄຳນຶງເຖິງການພັດທະນາໃນຫວ່າງມໍ່ໆມານີ້, ໂດຍສຸມໃສ່ສະເພາະທຸລະກິດກະສິກຳ, ການທ່ອງທ່ຽວ ແລະ ການອຸດສາຫະກຳປຸງແຕ່ງທົ່ວໄປ; ແລະ (iii) ໂດຍອີງໃສ່ (i) ແລະ (ii) ພັດທະນາ ແລະ ນຳສະ ເໜີແຜນດຳເນີນງານການພັດທະນາຂະແໜງການຄ້າ ແລະ ພາກທຸລະກິດເອກະຊົນທີ່ໄດ້ປັບຄືນໃໝ່ ແລະໄດ້ປັບປຸງໃຫ້ມີປະສິດທິພາບດີຂຶ້ນ.

2. **ບົດລາຍງານສຸດທ້າຍຂອງ DTIS ແລະ ແຜນດຳເນີນງານການພັດທະນາຂະແໜງການຄ້າ ແລະ ພາກທຸລະກິດເອກະຊົນສະບັບກວດຜ່ານແລ້ວ[3] ໄດ້ຖືກຍື່ນໃນເດືອນກໍລະກົດ 2012 ພາຍຫຼັງການອະນຸມັດໃນກອງປະຊຸມສຳມະນາເພື່ອຮັບຮອງເອົາໃນລະດັບຊາດ.** ບົດລາຍງານ DTIS ປີ 2012 ໄດ້ປະເມີນຂໍ້ຈຳກັດທັງພາຍໃນ ແລະ ພາຍນອກຂອງ ສປປ ລາວ ໃນການເຊື່ອມໂຍງເຂົ້າກັບເສດຖະກິດໂລກ ໂດຍມີການທົບທວນລະອຽດກ່ຽວກັບນະໂຍບາຍ ແລະ ຜົນງານການເຄື່ອນໄຫວຂອງວຽກງານການຄ້າ, ລະບົບສະຖາບັນທີ່ກ່ຽວຂ້ອງກັບການຄ້າ, ສະຖານະພາບການອຳນວຍຄວາມສະດວກທາງດ້ານການຄ້າ ແລະ ການຂົນສົ່ງ ແລະ ສະພາບແວດລ້ອມທາງທຸລະກິດ, ການກຳນົດບັນຫາ ແລະ ກາລະໂອກາດໃນການດຳເນີນທຸລະກິດກະສິກຳ, ການສົ່ງອອກທີ່ບໍ່ແມ່ນຊັບພະຍາກອນ, ການທ່ອງທ່ຽວ, ແລະ ກາລະໂອກາດທີ່ຈະໃຊ້ປະໂຫຍດຈາກການຂະຫຍາຍຕົວທີ່ແຂງແຮງຂອງການສົ່ງອອກຊັບພະຍາກອນ. ບົດລາຍງານ DTIS ປີ 2012 ໄດ້ເຊື່ອມສານເອົາບັນຫາການຫຼຸດຜ່ອນຄວາມທຸກຍາກ, ບົດບາດຍິງຊາຍ, ສິ່ງແວດລ້ອມ ແລະ ການພັດທະນາພາກທຸລະກິດເອກະຊົນເຂົ້າໃນການພັດທະນາລວມແລ້ວ. ການປັບປຸງບົດ DTIS ປີ 2021 ກໍຈະຮັບປະກັນວ່າສິ່ງເຫຼົ່ານີ້ຈະຖືກນຳເຂົ້າສູ່ກະແສຫຼັກຂອງການພັດທະນາເສດຖະກິດ-ສັງຄົມແຫ່ງຊາດເຊັ່ນກັນ.

3. **ປະຕິບັດຕາມບົດ DTIS ປີ 2012 ລັດຖະບານໄດ້ສະໜັບສະໜູນການຈັດຕັ້ງປະຕິບັດແຜນດຳເນີນງານ ໂດຍຜ່ານການເປີດໂຄງການພັດທະນາດ້ານການຄ້າ ໄລຍະ 2 (TDF-2) ໃນປີ 2013 ແລະ ໂຄງການສົ່ງເສີມຄວາມສາມາດການແຂ່ງຂັນ ແລະ ການຄ້າຂອງລາວ (LCT) ໃນປີ 2019.** ທັງສອງໂຄງການນີ້ໄດ້ຮັບການສະໜັບສະໜູນຈາກສະມາຄົມການພັດທະນາສາກົນ ຂອງກຸ່ມທະນາຄານໂລກ IDA ແລະ ຜ່ານ ກອງທຶນຮ່ວມສົມທົບທຶນ ຂອງຫຼາຍຝ່າຍ (MDTF) ດ້ວຍການເຂົ້າຮ່ວມຈາກ EU, GIZ, ການຊ່ວຍເຫລືອຂອງອົດສະຕຣາລີ Australian Aid, ການຊ່ວຍເຫລືອຂອງອຽກລັງ Irish Aid ແລະ ອົງການຊ່ວຍເຫລືອສາກົນ ຂອງສະຫະລັດ USAID. ມີຫຼາຍໂຄງການຊ່ວຍເຫຼືອທາງດ້ານວິຊາການທີ່ໄດ້ຊ່ວຍໃນການຈັດຕັ້ງປະຕິບັດແຜນດຳເນີນງານດັ່ງກ່າວ ໂດຍໄດ້ຮັບການສະໜັບສະໜູນດ້ານທຶນຮອນ ຫລື ດ້ານການຈັດຕັ້ງປະຕິບັດຈາກ USAID, GIZ, ສູນການຄ້າສາກົນ ITC, ບໍລິສັດການເງິນສາກົນ IFC, EIF, ທະນາຄານໂລກ, ທະນາຄານພັດທະນາອາຊີແລະອື່ນໆ. ແຜນດຳເນີນງານດັ່ງກ່າວໄດ້ສະທ້ອນໃຫ້ເຫັນວິໄສທັດທີ່ໄດ້ກຳນົດໄວ້ໃນແຜນຍຸດທະສາດການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ 7 (NSEP 7) ແລະ 8 (NSDEP 8 ) ເພື່ອເຮັດໃຫ້ ສປປ ລາວ ກາຍເປັນທີ່ມີເສດຖະກິດທັນສະໄໝ ແລະ ມີຄວາມຫຼາກຫຼາຍບົນເສັ້ນທາງຫລຸດພົ້ນອອກຈາກສະຖານະພາບການເປັນປະເທດດ້ອຍພັດທະນາ.

4. **NIU ໃນກົມແຜນການ ແລະ ການຮ່ວມມື ຂອງ MOIC ໄດ້ປະສານງານກ່ຽວກັບບົດ DTIS ປັບປຸງ ປີ 2012, TDF-2, ແລະປັດຈຸບັນກໍ່ກຳລັງປະສານງານການຈັດຕັ້ງປະຕິບັດໂຄງການ LCT, ການປັບປຸງ DTIS ປີ 2021** ແລະ ຫລາຍໆກິດຈະກຳດ້ານວິຊາການທີ່ກ່ຽວຂ້ອງກັບການຄ້າ, ລວມທັງໂຄງການການເຊື່ອມໂຍງເສດຖະກິດກັບພາກພື້ນ ຂອງລາວໃນອາຊຽນທີ່ GIZ ໄດ້ເປັນຜູ້ຈັດຕັ້ງປະຕິບັດ, ໂຄງການການພັດທະນາທາງດ້ານການຄ້າ ແລະ ຜູ້ປະກອບການ RELATED, ໂຄງການ ARISE Plus ທີ່ ITC ໄດ້ຈັດຕັ້ງປະຕິບັດ, ໂຄງການ ທີ່ໄດ້ຮັບທຶນ ຈາກ EIF ເພື່ອສົ່ງເສີມການສົ່ງອອກໃນເຂດພາກເໜືອ, ໂຄງການສະພາບແວດລ້ອມທຸລະກິດຂອງລາວ ສະໜັບສະໜູນໂດຍ USAID ແລະ ອື່ນໆ. NIU ເປັນກອງເລຂາ ຂອງທັງສອງກົນໄກການປະສານງານລະດັບນະໂຍບາຍພາຍໃຕ້ໜ່ວຍງານຂະແໜງ ການຄ້າແລະພາກເອກະຊົນ (TPSWG) ເຊັ່ນດຽວກັນກັບຂອບການຄຸ້ມຄອງການຈັດຕັ້ງປະຕິບັດແຜນງານໂຄງການພາຍໃຕ້ຄະນະກຳມະການຊີ້ນຳແຜນງານຈັດຕັ້ງປະຕິບັດ ໂຄງການໂດຍການມີສ່ວນຮ່ວມທີ່ເຂັ້ມແຂງຈາກພາກສ່ວນກ່ຽວຂ້ອງຕົ້ນຕໍ ທີ່ມີສ່ວນໄດ້ສ່ວນເສຍຈາກພາກລັດ, ພາກເອກະຊົນ ແລະ ຄູ່ຮ່ວມພັດທະນາ.

5. **ການຂະຫຍາຍຕົວຢ່າງໄວວາທີ່ຜ່ານມາແມ່ນເກີດຂຶ້ນຍ້ອນມີການລົງທຶນທີ່ໃຊ້ທຶນຮອນຫລາຍໂດຍທີ່ບໍ່ໄດ້ມີການສ້າງວຽກເຮັດງານພໍເທົ່າໃດ.** ການເພີ່ມລາຍໄດ້ຢູ່ເຂດຊົນນະບົດຍ່ອມເຮັດໃຫ້ຕ້ອງໄດ້ໃສ່ໃຈກ່ຽວກັບຄວາມສຳຄັນຂອງການເພີ່ມຜະລິດຕະພາບກະສິກຳ, ການຄືບໜ້າຂະຫຍາຍຕົວຂອງການຄ້າໃນພາກພື້ນ, ການເພີ່ມການເຊື່ອມຕໍ່ຕ່ອງໂສ້ມູນຄ່າກັບການປຸງແຕ່ງກະສິກຳ. ການລົງທຶນດ້ານການກໍ່ສ້າງ ແລະ ດ້ານພື້ນຖານໂຄງລ່າງໄດ້ຊຸກຍູ້ອັດຕາການເຕີບໂຕໃນເກືອບຕະຫລອດທົດສະວັດທີ່ຜ່ານມາ, ຢ່າງໃດກໍ່ຕາມ, ເມື່ອໂຄງການໃຫຍ່ຈຳນວນໜຶ່ງໄດ້ສ້າງສຳເລັດ, ອັດຕາການຂະຫຍາຍຕົວກໍ່ແມ່ນໄດ້ຫຼຸດລົງ. ໂດຍທຽບຖານເຫັນວ່າຂະແໜງການທ່ອງທ່ຽວຍັງໄດ້ມີການເຕີບໂຕຢ່າງວ່ອງໄວໃນທົດສະວັດທີ່

3. ຢູ່ ສປປ ລາວ, ແຜນຕາຕະລາງກິດຈະກຳວຽກລະອຽດ ຂອງ DTIS (DTIS Action Matrix) ແມ່ນເອີ້ນວ່າ ແຜນດຳເນີນງານການພັດທະນາຂະແໜງການຄ້າ ແລະ ພາກເອກະຊົນ, ຕໍ່ໄປເອີ້ນໂດຍຫຍໍ້ວ່າ "ແຜນດຳເນີນງານ".

ຜ່ານມາ, ແນວໃດກໍຕາມ, ການແຜ່ລະບາດຂອງພະຍາດໂຄວິດ-19 ໃນງວດທໍາອິດຂອງປີ 2020 ເຮັດໃຫ້ຄວາມຕ້ອງການດ້ານການທ່ອງທ່ຽວ ແລະ ການບໍລິການທີ່ຕິດພັນກັນທິດຕົວລົງ ເຮັດໃຫ້ເກີດການສູນເສຍວຽກເຮັດງານທໍາຢ່າງຫຼວງຫຼາຍ, ໂດຍສະເພາະແມ່ນແມ່ຍິງ.

6. **ຜົນກະທົບທາງດ້ານເສດຖະກິດຈາກການລະບາດຂອງພະຍາດໂຄວິດ-19 ໄດ້ເນັ້ນໃຫ້ເຫັນ ຈຸດອ່ອນຕ່າງໆທາງດ້ານເສດຖະກິດມະຫາພາກ ທີ່ສປປ ລາວ ມີມາກ່ອນແລ້ວ.** ດຸ່ນດ່ຽງບໍ່ສົມດຸນ... ດ່ວຍໜີ້ສິນສາທາລະນະໃນລະດັບສູງ, ການຂາດດຸນການຄ້າຂະໜາດໃຫຍ່ ແລະ ການເພິ່ງພາອາໄສການສົ່ງອອກທີ່ອີງໃສ່ຊັບພະ ຍາກອນ, ສປປ ລາວ ມີຄວາມບອບບາງຕໍ່ຜົນກະທົບທາງດ້ານເສດຖະກິດ. ການເຮັດໃຫ້ມີການລົງທຶນຂອງພາກເອກະຊົນ ແລະ ການເຕີບໂຕຂອງທຸລະກິດກະສິກໍາ, ຂະແໜງການບໍລິການ ແລະ ອຸດສາຫະກໍາປຸງແຕ່ງທີ່ໃຊ້ແຮງງານຫລາຍຈະສົ່ງເສີມຄວາມຫຼາກຫຼາຍທາງດ້ານເສດຖະກິດ ແລະ ສ້າງພູມຄຸ້ມກັນທີ່ເຂັ້ມ ແຂງພຽງພໍທາງດ້ານເສດຖະກິດ.

7. **ການໃຫ້ຄໍາໝັ້ນສັນຍາໃນການຟື້ນຟູສະຖຽນລະພາບຂອງເສດຖະກິດມະຫາພາກ ແລະ ການປັບ ປຸງສະພາບແວດລ້ອມທີ່ອໍານວຍແກ່ການດໍາເນີນທຸລະກິດ ແມ່ນປະຖົມປັດໄຈ ເພື່ອຈະໄດ້ຮັບຜົນປະໂຫຍດ ຈາກຍຸດທະສາດການເຕີບໂຕທີ່ເອົາການຄ້າເປັນຕົວຂັບເຄື່ອນ.** ການເພີ່ມທະວີການລົງທຶນໃນການເຄື່ອນ ໄຫວສ້າງມູນຄ່າເພີ່ມທີ່ແຂ່ງຂັນໄດ້ໃນສາກົນ ຍັງຮຽກຮ້ອງໃຫ້ມີການຫຼຸດຕົ້ນທຶນທາງການຄ້າ. ບົດ DTIS ສະບັບປັບປຸງ ໄດ້ລະບຸໃຫ້ເຫັນຕົ້ນທຶນດ້ານການຄ້າສະເພາະທີ່ພົວພັນກັບການຊອກຫາມາໄດ້ ແລະ ການປາກົດຕົວຂອງລາຄາຂອງວັດຖຸປະກອນ ແລະ ຄວາມສາມາດ ຂອງຜູ້ຜະລິດໃນການແຂ່ງຂັນໃນຕະຫຼາດພາກພື້ນ ແລະ ສາກົນ. ບົດລາຍງານໄດ້ສຸມໃສ່ບັນດານະໂຍບາຍການຄ້າ, ໃນນັ້ນມີບັນດາບັນຫາລະບຽບການທີ່ກະທົບຕໍ່ການຄ້າ, ການອໍານວຍຄວາມສະດວກດ້ານການຄ້າ ແລະ ການຂົນສົ່ງ ແລະ ນະໂຍບາຍທີ່ກະທົບເຖິງກະສິກໍາ, ບໍ່ແຮ່ ແລະ ການຂຸດຄົ້ນ ແລະ ການບໍລິການທ່ອງທ່ຽວ.

8. **ໃນຂະນະທີ່ຍັງຄົງມີຂໍ້ຈໍາກັດດ້ານພື້ນຖານໂຄງລ່າງຢູ່ ແລະ ການລົງທຶນດ້ານນີ້ກໍ່ຍັງມີຄວາມຈໍາເປັນ, 'ພື້ນຖານໂຄງລ່າງທີ່ບໍ່ເປັນພື້ນຖານວັດຖຸເຕັກນິກ(ໂຄງບົ່ນ)' ກໍ່ຈໍາເປັນທີ່ຈະຕ້ອງໄດ້ສຸມໃສ່ເຊັ່ນດຽວກັນ.** ສໍາຄັນໃນທີ່ນີ້ແມ່ນຄວນສັງເກດໃຫ້ເຫັນແຕ່ຕົ້ນວ່າ ບົດ DTIS ກ່ອນຫນ້ານີ້ໄດ້ກໍານົດເອົາການປະຕິຮູບນະໂຍບາຍ ແລະ ກົດລະບຽບຈໍານວນຫລວງຫລາຍເປັນບຸລິມະສິດ ເພື່ອຊຸກຍູ້ສົ່ງເສີມການລົງທຶນຂອງພາກເອກະຊົນໃນຂະແໜງທີ່ບໍ່ແມ່ນຊັບພະຍາກອນ. ບົດ DTIS ສະບັບປັບປຸງ ໄດ້ສຸມໃສ່ນະໂຍບາຍ ແລະ ລະບຽບການສະເພາະກ່ຽວກັບການຄ້າ, ເຊິ່ງມີຫຼາຍອັນຢູ່ໃນພາລະບົດບາດໜ້າທີ່ຂອງກະຊວງອຸດສາຫະກໍາ ແລະ ການຄ້າ (MOIC); ເຖິງຢ່າງໃດກໍຕາມ, ຕົ້ນທຶນການຄ້າຫຼາຍຢ່າງເກີດມາຈາກໂຄງປະກອບ ແລະ ຂະບວນການການຄຸ້ມຄອງ ດັດສົມໃນບັນດາກະຊວງສາຍຕັ້ງ (ກະສິກໍາ, ພະລັງງານ ແລະ ອື່ນໆ).

**ໂຄງຮ່າງຂອງບົດລາຍງານ**

9. ບົດທີ 1 ເປັນການສະເໜີ ກ່ຽວກັບພາບລວມຢ່າງສັງເຂບແບບເປີດຫົວເລື່ອງກ່ຽວກັບຫົວຂໍ້ຫຼັກທີ່ມີຢູ່ໃນບົດລາຍງານໃຫຍ່.

10. ບົດທີ 2 ສະເໜີບົດສະຫຼຸບໂດຍຫຍໍ້ກ່ຽວກັບສະພາບເສດຖະກິດມະຫາພາກ ແລະ ສະພາບແວດລ້ອມການດໍາເນີນທຸລະກິດທີ່ເປັນຢູ່ໃນປັດຈຸບັນ. ໃນບົດຍັງລວມມີການປະເມີນແບບເສດຖະສາດການ ເມືອງ ກ່ຽວກັບຄວາມຄືບໜ້າທີ່ບັນລຸໄດ້ ໃນການຈັດຕັ້ງປະຕິບັດແຜນດໍາເນີນງານການພັດທະນາຂະແໜງ ການຄ້າ ແລະ ພາກທຸລະກິດເອກະຊົນໃນປີ 2012.

11. ບົດທີ 3 ພັນລະນາເຖິງຜົນງານການເຄື່ອນໄຫວທາງດ້ານການຄ້າຂອງ ສປປ ລາວ ໂດຍ ຊີ້ໃຫ້ເຫັນຢ່າງເດັ່ນຊັດກ່ຽວກັບໂຄງປະກອບສິນຄ້າທີ່ບໍ່ຫລາກຫລາຍ ແລະ ການປ່ຽນແປງສ່ວນແບ່ງຂ້ອນຂ້າງເລັກນ້ອຍ ຂອງການຄ້າກັບບັນດາປະເທດໃນອາຊຽນ.

12. ບົດທີ 4 ທົບທວນບັນດານະໂຍບາຍການຄ້າທີ່ມີຢູ່. ການທົບທວນຄືນບັນດາຕາຕະລາງອັດຕາພາສີທີ່ມີຢູ່ ໄດ້ສັງເກດເຫັນວ່າມີການປົກປ້ອງໃນລະດັບສູງຕໍ່ຜະລິດຕະພັນສິນຄ້າທີ່ກະທົບໄວຈໍານວນນ້ອຍໜຶ່ງ ລວມມີ ນໍ້າຕານ, ເຂົ້າ ແລະ ແຜນແພ. ບົດຍັງໄດ້ນໍາສະເຫນີຫຼັກຖານຈາກຖານຂໍ້ມູນໃຫມກ່ຽວກັບຕົ້ນທຶນທາງການຄ້າ.

13. ບົດທີ 5 ສຸມໃສ່ລະບຽບວິທີປະຕິບັດທາງການຄ້າ, ການແຈ້ງພາສີຢູ່ດ່ານຊາຍແດນ ແລະ ໂລຊິດສະຕິກການຄ້າ. ການຮັບປະກັນໃຫ້ການແຈ້ງພາສີຢູ່ດ່ານຊາຍແດນມີປະສິດທິພາບ ແລະ ຄາດຄະເນໄດ້ແມ່ນສິ່ງຈໍາເປັນເພື່ອສົ່ງເສີມການແຂ່ງຂັນກັບພາກພື້ນ ແລະ ກັບທົ່ວໂລກ. ການບໍລິການດ້ານພາສີໄດ້ມີຄວາມຄືບໜ້າຢ່າງໃຫຍ່ຫຼວງນັບແຕ່ມີບົດ DTIS ປີ 2012 ສະບັບກ່ອນ ໃນການປັບປຸງລະບຽບວິທີປະຕິ ບັດການທາງພາສີໃຫ້ທັນສະໄໝ; ຢ່າງໃດກໍຕາມ, ສິ່ງທ້າທາຍທີ່ຮ້າຍແຮງຍັງຄົງມີຢູ່. ການກວດກາສິນຄ້າຕົວຈິງໃນອັດຕາທີ່ສູງ ຄວນຈະເປັນທີ່ມາຂອງຄວາມກັງວົນ. ຄວາມໝັ້ນໝາຍທີ່ມີມາແຕ່ດົນນານໃນການປັບປຸງບັນດາອົງການຄຸ້ມຄອງຊາຍແດນໃຫ້ມີປະສິດທິພາບຂຶ້ນ ແລະ ການສ້າງຕັ້ງລະບົບແຈ້ງເສຍພາສີປະຕູດຽວກໍຍັງຈະຕ້ອງໄດ້ຈັດຕັ້ງປະຕິບັດຢ່າງຄົບຖ້ວນຕື່ມອີກ.

14. ບົດທີ 6 ມີການເບິ່ງຢ່າງເລິກເຊິ່ງກວ່າເກົ່າຕໍ່ກັບຜົນການຈັດຕັ້ງປະຕິບັດທາງດ້ານວຽກງານກະສິກຳໃນໄລຍະຫລັງໆມານີ້, ເຊິ່ງກວມເອົາ 16,2 ສ່ວນຮ້ອຍຂອງ GDP ແລະ ເປັນແຫຼ່ງລາຍໄດ້ຫຼັກຂອງ 61 ສ່ວນຮ້ອຍຂອງປະຊາກອນ (7,2 ລ້ານຄົນ). ບົດນີ້ໃຊ້ທັດສະນະຂອງການຄ້າໃນການເບິ່ງກະສິກຳ.

15. ບົດທີ 7 ພິຈາລະນາໃນລາຍລະອຽດກວ່າໃນເລື່ອງຂອງອຸດສາຫະກຳການທ່ອງທ່ຽວໃນ ສປປ ລາວ. ສປປ ລາວ ມີທຳເລທີ່ຕັ້ງທີ່ໄດ້ປຽບທີ່ຈະໄດ້ຮັບຜົນປະໂຫຍດຈາກການທ່ອງທ່ຽວ ດ້ວຍການມີຄວາມສວຍງາມທາງດ້ານທັດສະນີຍະພາບຂອງຫຼວງພະບາງ, ການເປັນມໍລະດົກວັດທະນະທຳອັນອຸດົມສົມບູນ, ຄວາມສະຫງ່າງາມຂອງແມ່ນ້ຳຂອງ ແລະ ການມີຊາຍແດນຕິດກັບ ສປ ຈີນ, ກຳປູເຈຍ, ຫວຽດນາມ ແລະ ໄທ. ເຖິງວ່າຈະມີຊັບສິນທຳມະຊາດເຫຼົ່ານີ້ ສປປ ລາວ ກໍຍັງປະຕິບັດບໍ່ໄດ້ໝົດຕາມທ່າແຮງຂອງຕົນ. ໃນບົດນີ້ໄດ້ສຸມໃສ່ບັນດາຂໍ້ຈຳກັດໃນການເຕີບໂຕໃນຕໍ່ໜ້າ ແລະ ການເພີ່ມການມີຂົວຕໍ່ກັບບັນດາຂະແໜງການເສດຖະກິດອື່ນ, ນັບທັງ ສະພາບແວດລ້ອມທີ່ເອື້ອອຳນວຍແກ່ການດຳເນີນທຸລະກິດ ແລະ ຂອບນະໂຍບາຍ ແລະ ລະບຽບການຄຸ້ມຄອງຂະແໜງທ່ອງທ່ຽວ ເຊັ່ນກັນ. ວຽກງານນີ້ຈະສະແດງໃຫ້ເຫັນຂໍ້ມູນເບື້ອງໃນເພື່ອຮັບໃຊ້ແກ່ການທົບທວນນະໂຍບາຍການທ່ອງທ່ຽວ ແລະ ການປັບປຸງຍຸດທະສາດການທ່ອງທ່ຽວແຫ່ງຊາດ.

16. ສຸດທ້າຍ, ບົດທີ 8 ແມ່ນສຸມໃສ່ອຸດສາຫະກຳເບົາ ແລະ ເບິ່ງເລິກເຖິງກາລະໂອກາດໃນການຂະຫຍາຍການຕິດພັນເປັນຂົວຕໍ່ກັບບັນດາຂະແໜງທີ່ສຳຄັນ ຂອງກະສິກຳ ແລະ ການທ່ອງທ່ຽວ.



# ບົດທີ 2: ພາບລວມຂອງເສດຖະກິດມະຫາພາກ, ສະພາບແວດລ້ອມທີ່ເອື້ອອຳນວຍແກ່ການດຳເນີນທຸລະກິດ ແລະ ບົດ DTIS ປີ 2012

17. **ບົດນີ້ເປັນການສັງລວມຫຍໍ້ດ້ານເສດຖະກິດມະຫາພາກກ່ຽວກັບທ່າອ່ຽງໃນໄລຍະມໍ່ໆມານີ້ ແລະ ການຄາດຄະເນໄລຍະກາງ, ຕິດຕາມດ້ວຍການສະຫຼຸບສະພາບແວດລ້ອມທີ່ເອື້ອອຳນວຍໃຫ້ແກ່ທຸລະກິດ.** ມັນໄດ້ມາຈາກບັນດາຕົວຊີ້ວັດຂອງທະນາຄານໂລກດ້ານການດຳເນີນທຸລະກິດ, ເຊິ່ງໄດ້ຈັດອັນດັບປະເທດຕ່າງໆທຽບໃສ່ກັນແລະກັນແລະທຽບກັບການປະຕິບັດທີ່ດີທີ່ສຸດຂອງ ໂລກ. ບົດນີ້ລວມມີການທົບທວນປະ ສົບການຂອງ ສປປ ລາວ ໃນການຈັດຕັ້ງປະຕິບັດຂໍ້ສະເໜີແນະທີ່ໄດ້ຮັບຮອງໃນບົດ DTIS ປີ 2012. ມັນຍັງໄດ້ສະຫຼຸບບົດຮຽນທີ່ສຳຄັນທີ່ຖອດຖອນໄດ້ຈາກບົດ DTIS ປີ 2012, ໂດຍສັງເກດວ່າການປັບປຸງ DTIS ນີ້ຈະຊ່ວຍໄດ້ແນວໃດກັບການຈະເຮັດໃຫ້ ສປປ ລາວຫລຸດພົ້ນໄດ້ຈາກສະຖານະພາບປະເທດດ້ອຍພັດທະນາ LDC ແລະການຈັດຕັ້ງປະຕິບັດ NSDEP ຄັ້ງທີ 8. ສຸດທ້າຍບົດ ແມ່ນລົງທ້າຍດ້ວຍການສະຫຼຸບສັງລວມກ່ຽວກັບຂົງເຂດຈຸດສຸມຂອງ DTIS.

## 2.1 ພາບລວມຂອງເສດຖະກິດມະຫາພາກ

18. **ໃນໄລຍະ 25 ປີຜ່ານມາ ສປປ ລາວ ມີອັດຕາການຂະຫຍາຍຕົວ(ຕົວຈິງ) ສະເລ່ຍຕໍ່ປີ ແມ່ນ 6,9 ສ່ວນຮ້ອຍ.** ໂຄງປະກອບເສດຖະກິດໄດ້ມີການປ່ຽນແປງຢ່າງຫຼວງຫຼາຍໃນໄລຍະ 25 ປີທີ່ຜ່ານມາເນື່ອງຈາກວ່າອຸດສາຫະກຳທີ່ອີງໃສ່ຊັບພະຍາກອນທຳມະຊາດຂະໜາດໃຫຍ່ໄດ້ເປັນຕົວຂັບເຄື່ອນຕົ້ນຕໍຂອງການຂະຫຍາຍຕົວຂອງ GDP. ອຸດສາຫະກຳທີ່ອີງໃສ່ຊັບພະຍາກອນທຳມະຊາດ, ຕົ້ນຕໍແມ່ນການຂຸດຄົ້ນບໍ່ແຮ່ແລະພະລັງງານໄຟຟ້າ, ໄດ້ບັນລຸອັດຕາການເຕີບໂຕທີ່ແທ້ຈິງຕໍ່ປີເຖິງ 18 ສ່ວນຮ້ອຍໃນ 12 ປີຮອດສິ້ນປີ 2015. ກະສິກຳໄດ້ຫຼຸດລົງຈາກ 42,2 ສ່ວນຮ້ອຍຂອງ GDP ໃນປີ 1995 ເປັນ 15,3 ສ່ວນຮ້ອຍໃນປີ 2019, ໃນຂະນະທີ່ອຸດສາຫະກຳໄດ້ເພີ່ມຂຶ້ນຈາກ 18,7 ເຖິງ 30,9 ສ່ວນຮ້ອຍໃນໄລຍະດຽວກັນ. ການບໍລິການ, ຕົ້ນຕໍແມ່ນຮັບໃຊ້ພາຍໃນ, ເປັນຂະແໜງດຽວທີ່ໃຫຍ່ທີ່ສຸດຢູ່ທີ່ 40,8 ສ່ວນຮ້ອຍໃນປີ 1995 ແລະ 42,6 ສ່ວນຮ້ອຍໃນປີ 2019. ເຖິງວ່າ ສປປ ລາວ ມີສະຖິຕິການເຕີບໂຕທີ່ໜ້າປະທັບໃຈ, ແຕ່ເຫັນວ່າພື້ນຖານການເຕີບແມ່ນແຄບ, ສ້າງວຽກເຮັດງານທຳກໍ່ໜ້ອຍ ແລະ ການສົ່ງອອກຍັງມີຄວາມກະຈຸກຕົວໃນສິນຄ້າຈຳນວນໜຶ່ງ.

19. **NSEDP ຄັ້ງທີ VII (2011-2015) ກຳນົດເປົ້າໝາຍການເຕີບໂຕ 8 ສ່ວນຮ້ອຍຕໍ່ປີ ແລະ ໄດ້ສຸມໃສ່ການລົງທຶນໃສ່ພື້ນຖານໂຄງລ່າງ ແລະ ເພີ່ມທະວີການເຊື່ອມຈອດເພື່ອເຊື່ອມໂຍງເສດຖະກິດກັບພາກພື້ນ ແລະ ສາກົນ.** ແຜນການດັ່ງກ່າວຍັງໄດ້ເນັ້ນເຖິງຄວາມສຳຄັນຂອງການສະໜອງບໍລິການສາທາ ລະນະໃຫ້ມີປະສິດທິຜົນກວ່າ. ໃນໄລຍະນີ້, ອຸດສາຫະກຳແລະການບໍລິການເພີ່ມຂຶ້ນ 12 ແລະ 7,5 ສ່ວນຮ້ອຍຕໍ່ປີຕາມລຳດັບ, ໃນຂະນະທີ່ກະສິກຳເພີ່ມສະເລ່ຍ 3,7 ສ່ວນຮ້ອຍ. ການລົງທຶນພາກລັດຂະໜາດໃຫຍ່ນີ້ໃນເບື້ອງຕົ້ນແມ່ນໄດ້ຮັບການຂັບເຄື່ອນໂດຍການໃຊ້ນະໂຍບາຍການເງິນ ແລະ ເງິນຕາແບບຂະຫຍາຍ ຕົວ; ແນວໃດກໍ່ຕາມ, ໃນປີ 2013 ການຂາດດຸນງົບປະມານໄດ້ເພີ່ມຂຶ້ນຢ່າງຫຼວງຫຼາຍເຮັດໃຫ້ລັດຖະບານໄດ້ສະລໍການລົງທຶນຂອງລັດຈຳນວນໜຶ່ງ ແລະຍົກເລີກການເພີ່ມເງິນອຸດໜູນຄ່າຄອງຊີບ ຂອງພະນັກງານລັດຖະກອນ. ຂໍ້ຈຳກັດດ້ານການແລກປ່ຽນເງິນຕາຕ່າງປະເທດ ແລະ ອັດຕາເງິນເຟີ້ທີ່ເພີ່ມຂຶ້ນ ໄດ້ທຳລາຍຄວາມສາມາດແກ່ງແຍ່ງແຂ່ງຂັນຂອງການສົ່ງອອກ ໃນຂະນະທີ່ລາຄາສິນຄ້ານຳເຂົ້າເພີ່ມຂຶ້ນ ເຮັດໃຫ້ຂາດດຸນການຄ້າຫລາຍຂຶ້ນ.

20. **ການຂະຫຍາຍຕົວຂອງ GDP ໃນໄລຍະ 2013-2019 ໄດ້ຖືກຂັບເຄື່ອນຈາກການກໍ່ສ້າງພື້ນຖານໂຄງລ່າງຂະໜາດໃຫຍ່.** ເຂື່ອນໄຟຟ້າ, ພື້ນຖານໂຄງລ່າງຄົມມະນາຄົມຂະໜາດໃຫຍ່ ແລະໂຄງການກໍ່ສ້າງກຳລັງເລີ່ມດຳເນີນການຢ່າງເຕັມສ່ວນ. ນັບຕັ້ງແຕ່ປີ 2012, ອຸດສາຫະກຳປຸງແຕ່ງ (ຕົ້ນຕໍແມ່ນທຸລະກິດກະສິກຳເຊັ່ນ: ອາຫານ, ເຄື່ອງດື່ມ ແລະຢາສູບ), ອຸດສາຫະກຳໂລຫະພື້ນຖານ (ວັດສະດຸກໍ່ສ້າງ) ແລະການຄ້າຂາຍຍ່ອຍມີການຂະຫຍາຍຕົວຢ່າງໄວວ່າກວ່າ (ເບິ່ງຮູບ 1 ຂ້າງລຸ່ມນີ້). ກະສິກຳໄດ້ສືບຕໍ່ຂະຫຍາຍຕົວແຕ່ຢູ່ໃນຈັງຫວະທີ່ຊ້າລົງຫຼາຍກວ່າ, ມີການຫຼຸດລົງເລັກນ້ອຍໃນປີ 2019.

21. **ກະສິກຳສືບຕໍ່ເປັນຂະແໜງທີ່ເປັນບ່ອນທຳມາຫາກິນລ້ຽງຊີບຂອງຄົວເຮືອນປະມານ 2/3 ໃນຂະນະທີ່ກວມເອົາ 15,3 ສ່ວນຮ້ອຍຂອງ GDP ໃນປີ 2019.** ຜູ້ໃຫຍ່ປະມານ 2 ລ້ານຄົນເຮັດວຽກໃນຂະແໜງ ກະສິກຳ. ເຂົ້າກິນກວມເອົາເນື້ອທີ່ປູກຝັງຫຼາຍກວ່າ 70 ສ່ວນຮ້ອຍ. ຜະລິດຕະພາບຍັງຕໍ່າຢູ່ ແລະ ການຜະລິດສ່ວນຫຼາຍແມ່ນຂາຍຢູ່ພາຍໃນປະເທດ, ໂດຍມີການສົ່ງອອກສະເລ່ຍປະມານ 5 ສ່ວນຮ້ອຍ. ເຖິງວ່າຂະແໜງການຈະມີຄວາມສຳຄັນໃນການຫຼຸດຜ່ອນຄວາມທຸກຍາກ ແລະການຊຸກຍູ້ການເຕີບໂຕ, ຂະແໜງກະສິກຳກໍ່ຍັງມີຜົນການເຄື່ອນໄຫວທີ່ຕໍ່າກວ່າຕະຫລອດມາເມື່ອທຽບໃສ່ການເຕີບໂຕຂອງຂະແໜງອຸດສາ ຫະກຳ ແລະ ການບໍລິການ.

## ຮູບ 2.1 ການປະກອບສ່ວນຂອງການເຕີບໂຕ ແລະ ສ່ວນແບ່ງແຍກຕາມຂະແໜງການຕົ້ນຕໍ




*ແຫລ່ງທີ່ມາ: ສູນສະຖິຕິແຫ່ງຊາດ ຂອງ ສປປ ລາວ.*

22. **ການບໍລິການປະກອບສ່ວນຫຼາຍກວ່າ 40 ສ່ວນຮ້ອຍຂອງ GDP.** ການບໍລິການສ່ວນໃຫຍ່ໃນ ສປປ ລາວ ແມ່ນການບໍລິການທີ່ຮັບໃຊ້ຕະຫລາດພາຍໃນ ແລະ ດັ່ງນັ້ນການສົ່ງອອກການບໍລິການໄດ້ປະກອບສ່ວນພຽງແຕ່ 5 ສ່ວນຮ້ອຍຂອງ GDP ໃນປີ 2018, ເຖິງແມ່ນວ່າການປະກອບສ່ວນຂອງມູນຄ່າເພີ່ມແມ່ນຂ້ອນຂ້າງສູງ.

23. **ດ້ວຍການແຜ່ລະບາດຂອງພະຍາດໂຄວິດ-19, ປີ 2020 ໄດ້ເຮັດໃຫ້ GDP ຂອງ ສປປ ລາວ ຖືກຖອຍ.** ການລະບາດຂອງພະຍາດໂຄວິດ-19 ໄດ້ເລີ່ມສົ່ງຜົນກະທົບຕໍ່ ສປປ ລາວ ໃນໄຕມາດທີ 2 ປີ 2020 ແລະ ສົ່ງຜົນໃຫ້ເສດຖະກິດລາວຊຸດໂຊມລົງຢ່າງໄວວາ. ໂລກລະບາດໄດ້ຢຸດການເຕີບໂຕທາງເສດຖະກິດ ແລະ GDP ຄາດວ່າຈະຫຼຸດລົງ. IMF ໄດ້ຄາດຄະເນການຫຼຸດລະດັບລະຫວ່າງ - 0,6 ຫາ -2,4 ສ່ວນຮ້ອຍຂອງ GDP ສໍາລັບປີ 2020 ເຊິ່ງກົງກັນຂ້າມກັບການຄາດຄະເນຂອງ GOL ກ່ອນຫນ້ານີ້ວ່າການເຕີບໂຕທີ່ແທ້ຈິງຂອງ GDP ແມ່ນ 3,3 ສ່ວນຮ້ອຍ. ການເດີນທາງ ແລະ ການທ່ອງທ່ຽວ ເຊິ່ງເປັນຂະແໜງບໍລິການທີ່ສໍາຄັນ, ໄດ້ເຫັນການຫຼຸດລົງຂອງຄວາມຕ້ອງການສາກົນທີ່ເປັນຜົນມາຈາກການປິດເມືອງຫຼາຍຄັ້ງ ແລະ ຂໍ້ຈໍາກັດການຂ້າມໄປມາຕາມຊາຍແດນທີ່ຍັງສືບຕໍ່ຢູ່, ລວມທັງການໂຈະການໃຫ້ບໍລິການວີຊາກັບດ່ານ ຢູ່ທຸກຈຸດຜ່ານຂອງດ່ານສາກົນ. ຍິ່ງໄປກວ່ານັ້ນ, ຍ້ອນຄົນງານທີ່ໄປເຮັດວຽກ ຢູ່ຕ່າງປະ ເທດໄດ້ກັບຄືນມາ, ການສົ່ງເງິນຄືນເຂົ້າປະເທດກໍ່ໄດ້ຫຼຸດລົງ. ໃນເດືອນ ພຶດສະພາ 2020, ອັດຕາການວ່າງງານເພີ່ມຂຶ້ນເປັນ 25 ສ່ວນຮ້ອຍ ຈາກ 16 ສ່ວນຮ້ອຍໃນເດືອນທັນວາ 2019. ການລະບາດຂອງພະຍາດໂຄວິດ-19 ໄດ້ເຮັດໃຫ້ຈຸດອ່ອນ ທາງດ້ານໂຄງປະກອບເສດຖະກິດທີ່ມີຢູ່ ຂອງ ສປປ ລາວ ຂີ້ຮ້າຍລົງ ເຮັດໃຫ້ການຂາດດຸນງົບປະມານຂະຫຍາຍຂຶ້ນຢ່າງໄວວາ, ໜີ້ສິນຂອງລັດຖະບານເພີ່ມຂຶ້ນ, ການຫລຸດລົງຂອງຄັງສໍາຮອງເງິນຕາຕ່າງປະເທດ ແລະ ຄວາມສ່ຽງໃນການບໍ່ສາມາດຊໍາລະໜີ້ສິນເພີ່ມຂຶ້ນ.

24. **ອັດຕາການເຕີບໂຕຂອງ GDP ຫຼຸດລົງໃນປີ 2019 ແລະຫຼຸດລົງຕໍ່າກວ່າ 1% ໃນປີ 2020.** ຫຼັງຈາກສອງທົດສະວັດຂອງອັດຕາການເຕີບໂຕທີ່ສູງ, ຍ້ອນການກໍ່ສ້າງພື້ນຖານໂຄງລ່າງຂະຫນາດໃຫຍ່ແລະການພັດທະນາການຂຸດຄົ້ນບໍ່ແຮ່, ການເຕີບໂຕຂອງເສດຖະກິດຫຼຸດລົງຕໍ່າກວ່າ 6 ສ່ວນຮ້ອຍໃນປີ 2019 ແລະຫຼັງຈາກນັ້ນຫຼຸດລົງເປັນ 0,4 ສ່ວນຮ້ອຍໃນ ປີ 2020 ຍ້ອນການຖົດຖອຍຂອງເສດຖະກິດໂລກທີ່ກ່ຽວພັນກັບການແຜ່ລະບາດຂອງ COVID-19. ກ່ອນຈະເກີດການກະທົບເສດຖະກິດແບບນີ້ ສປປ ລາວ ມີຄວາມບອບບາງທາງດ້ານໂຄງສ້າງຫຼາຍດ້ານ ລວມທັງໜີ້ສິນສາທາລະນະທີ່ເພີ່ມຂຶ້ນ ແລະ ຄວາມບອບບາງຂອງຂະແໜງການເງິນທີ່ຊຸດໂຊມລົງ.

25. **ການຂາດຄວາມຫຼາກຫຼາຍຂອງການສົ່ງອອກ ແລະ ການເພິ່ງພາອາໄສຕະຫຼາດຈໍານວນໜຶ່ງ ເຮັດໃຫ້ ສປປ ລາວ ມີຄວາມສ່ຽງຕໍ່ຜົນກະທົບຈາກຄວາມຕ້ອງການຂອງພາຍນອກ.** ການສົ່ງອອກແມ່ນສຸມໃສ່ຜະລິດຕະພັນ ທີ່ອີງໃສ່ຊັບພະຍາກອນໄປຍັງ 3 ປະເທດບ້ານໃກ້ເຮືອນຄຽງຄື: ສປ ຈີນ, ໄທ ແລະ ຫວຽດນາມ. ການລົງທຶນດ້ານພື້ນຖານໂຄງລ່າງຂະໜາດໃຫຍ່ ແລະ ການເພີ່ມຂຶ້ນຂອງການບໍລິໂພກພາຍໃນໄດ້ຊຸກຍູ້ການເຕີບໂຕຂອງການນໍາເຂົ້າ ສົ່ງຜົນຕໍ່ການຂາດດຸນບັນຊີຊໍາລະປົກກະຕິເພີ່ມຂຶ້ນ. ນັບຕັ້ງແຕ່ປີ 2015 ເປັນຕົ້ນມາ, ລວມຍອດຄັງສໍາຮອງເງິນຕາຕ່າງປະເທດແມ່ນຢູ່ໃນລະດັບຕໍ່າ, ສະເລ່ຍກຸ້ມກັບການນໍາເຂົ້າພຽງແຕ່ 2 ເດືອນກວ່າໆ. ນີ້ແມ່ນຕໍ່າກວ່າເກນທີ່ແນະນໍາໃຫ້ຮັກສາສະຖຽນລະພາບ

4. ສໍາລັບບັນດາປະເທດທີ່ມີບັນຊີທຶນເປີດໜ້ອຍຕາມປະເພນີປະຕິບັດເມື່ອສາມາດກຸ້ມໄດ້ສໍາລັບການນໍາເຂົ້າ 3 ເດືອນຖືວ່າເປັນຄັງສໍາຮອງຂັ້ນຕໍ່າ, ສໍາລັບຜູ້ມີບັນຊີທຶນທີ່ຈໍາກັດໜ້ອຍ, ມາດຕະການອື່ນໆເຊັ່ນ: ອັດຕາສ່ວນທຶນສໍາຮອງຕໍ່ໜີ້ສິນໄລຍະສັ້ນ ("Greenspan-Guidotti" ແມ່ນໃຫ້ນໍາໃຊ້ກົດກະຕິກາການໃຫ້ສາມາດຄອບຄຸມໄດ້ 100 ສ່ວນຮ້ອຍສໍາລັບຫນີ້ສິນໄລຍະສັ້ນ). ສໍາລັບການຄົ້ນຄວ້າສິນທະນາລະອຽດກ່ຽວກັບວິທີການຄວາມພຽງພໍຂອງຄັງສໍາຮອງເງິນຕາຕ່າງປະເທດ ແມ່ນໃຫ້ເບິ່ງການປະເມີນຂໍ້ສະເໜີສະເພາະຂອງຄັງສໍາຮອງ, IMF (2015)

ຂອງເສດຖະກິດມະຫາພາກ[4]. ຄັງສຳຮອງເງິນຕາຕ່າງປະເທດຍັງຕ່ຳ, ເຮັດໃຫ້ເກີດການຂາດແຄນເງິນຕາຕ່າງປະເທດໃນຕະຫຼາດທາງການ, ເຊິ່ງຊ່ອງວ່າງລະຫວ່າງຕະຫຼາດທາງການ ແລະ ຕະຫຼາດບໍ່ເປັນທາງການເກືອບສອງເທົ່າຈາກ 8 ສ່ວນຮ້ອຍໃນຕົ້ນປີ 2021 ເປັນ 15,8 ສ່ວນຮ້ອຍໃນຕົ້ນເດືອນກໍລະກົດ 2021.

26. **ໜີ້ສິນພາກລັດບັນລຸ 64,5 ສ່ວນຮ້ອຍຂອງ GDP ໃນປີ 2020.** ນີ້ແມ່ນການເພີ່ມຂຶ້ນ 10,2 ສ່ວນຮ້ອຍຈາກປີກ່ອນ. ໃນໄລຍະກາງ, ສປປ ລາວ ມີພັນທະຊຳລະໜີ້ສິນພາຍນອກ 1,1 ຕື້ໂດລາສະຫະລັດຕໍ່ປີ. ໃນປີ 2019 ໜີ້ສິນຕ່າງປະເທດທັງໝົດຂອງລາວມີເຖິງ 16,9 ຕື້ໂດລາ, ໜີ້ສິນສາທາລະນະ ແລະ ໜີ້ສິນທີ່ລັດຖະບານເປັນຜູ້ຄ້ຳປະກັນໃຫ້ ກວມເອົາ 10,3 ຕື້ໂດລາສະຫະລັດ. ອີງການຈັດລະດັບດ້ານສິນເຊື່ອ ຂອງສາກົນ Fitch Ratings ຄາດຄະເນວ່າ, ໃນປີ 2020, ໜີ້ສິນພາຍນອກ ແລະ ໜີ້ສິນທີ່ລັດຖະບານເປັນຜູ້ຄ້ຳປະກັນໃຫ້ (PPG) ແມ່ນເທົ່າກັບ 590 ສ່ວນຮ້ອຍຂອງລາຍຮັບທັງໝົດຂອງລັດຖະບານ. ການລົງທຶນໃນຂະແໜງໄຟຟ້າກວມເອົາເກືອບເຄິ່ງໜຶ່ງຂອງໜີ້ສິນສາທາລະນະທີ່ສະສົມ. ໃນກາງປີ 2020, ຈີນກວມເອົາເກືອບເຄິ່ງໜຶ່ງ (47 ສ່ວນຮ້ອຍ) ຂອງໜີ້ສິນສາທາລະນະພາຍນອກຂອງລາວທັງໝົດ, ສ່ວນທີ່ຍັງເຫຼືອແມ່ນແບ່ງອອກລະຫວ່າງເງິນກູ້ຫຼາຍຝ່າຍດອກເບ້ຍຕ່ຳ ແລະ ແລະ ເງິນກູ້ການຄ້າ. ການຫຼຸດລະດັບດ້ານຄວາມສາມາດຊຳລະໜີ້, ຄວາມບໍ່ສົມດຸນທາງການເງິນທີ່ຂຸດໂຊມລົງ ແລະ ໂອກາດທີ່ຈຳກັດໃນການລະດົມທຶນພາຍໃນໄດ້ສົ່ງຜົນໃຫ້ຕົ້ນທຶນກູ້ຢືມເພີ່ມຂຶ້ນ.

27. **ການເພີ່ມຂຶ້ນຢ່າງໄວວາຂອງໜີ້ສິນສາທາລະນະໄດ້ຈຳກັດຄວາມສາມາດຈັດສັນທຶນໃນງົບປະມານຂອງລັດຖະບານຢ່າງຮ້າຍແຮງທີ່ສຸດ ໂດຍບໍ່ໃຫ້ແຕະຕ້ອງຄວາມຍືນຍົງຂອງຖານະການເງິນ ແລະ ສະຖຽນລະພາບເສດຖະກິດ.** ດ້ວຍໜີ້ສິນສາທາລະນະ ແລະ ໜີ້ສິນທີ່ລັດຖະບານເປັນຜູ້ຄ້ຳປະກັນໃຫ້ ເປັນເງິນຕາຕ່າງປະເທດຫຼາຍກວ່າ 80 ສ່ວນຮ້ອຍ, ການເສື່ອມຄ່າຂອງອັດຕາແລກປ່ຽນຈະສົ່ງຜົນກະທົບທາງລົບຕໍ່ໃບສະຫລຸບຊັບສົມບັດຂອງລັດຖະບານ.

28. **ຂອບເສດຖະກິດມະຫາພາກຂອງ ສປປ ລາວ ບໍ່ຍືນຍົງແຕ່ກ່ອນການລະບາດຂອງພະຍາດໂຄວິດ-19 ເນື່ອງຈາກໜີ້ສິນເພີ່ມຂຶ້ນຢ່າງຫຼວງຫຼາຍ, ຄັງສຳຮອງເງິນຕາຕ່າງປະເທດທີ່ບົກແຫ້ງ ແລະ ລະບົບການເງິນທີ່ອ່ອນແອລົງ.** ການຂາດຄັງສຳຮອງເງິນຕາຕ່າງປະເທດ ແລະການຂາດດຸນງົບປະມານຂະໜາດໃຫຍ່ກ່ອນການແຜ່ລະບາດຂອງພະຍາດດັ່ງກ່າວໄດ້ຈຳກັດຄວາມສາມາດຂອງລັດຖະບານໃນການປະຕິບັດບັນດາມາດຕະການກະຕຸ້ນ. ໃນໄລຍະນີ້ ໄດ້ເຮັດໃຫ້ສະພາບເສດຖະກິດຕົກຕ່ຳລົງ ແລະ ເປີດເຜີຍຄວາມສ່ຽງດ້ານໂຄງສ້າງຂອງ ສປປ ລາວ. ໃນເດືອນກັນຍາ 2020, Moody's ໄດ້ຫຼຸດການຈັດອັນດັບດ້ານສິນເຊື່ອຂອງເສດຖະກິດເພື່ອບົ່ງບອກເຖິງ "ຄວາມໜ້າຈະເປັນໄປໄດ້ຕົວຈິງຂອງຄວາມບໍ່ສາມາດຊຳລະໜີ້ໄດ້ໃນໄລຍະສະເພາະໜ້າ."

29. **ການຟື້ນຟູຄວາມໝັ້ນຄົງຂອງເສດຖະກິດມະຫາພາກ ແລະ ສະກັດກັ້ນໂລກລະບາດ COVID-19 ແມ່ນບູລິມະສິດຕົ້ນຕໍອັນຮີບດ່ວນ.** ທະນາຄານໂລກໄດ້ກຳນົດສາມຂົງເຂດຈຸດສຸມທີ່ຈຳເປັນເພື່ອຟື້ນຟູສະ ຖຽນລະພາບຂອງເສດຖະກິດມະຫາພາກຄື: (i) ເພີ່ມທະວີການຄຸ້ມຄອງໜີ້ສິນ ແລະ ຄວາມໂປ່ງໃສ; (ii) ເພີ່ມທະວີຄວາມຍືນຍົງທາງດ້ານງົບປະມານໂດຍຜ່ານການລະດົມລາຍຮັບພາຍໃນໃຫ້ຫລາຍຂຶ້ນ ແລະ ປັບປຸງປະສິດທິພາບການໃຊ້ຈ່າຍ; ແລະ (iii) ປັບປຸງຄວາມໝັ້ນຄົງຂອງຂະແໜງການເງິນໂດຍຜ່ານການຄຸ້ມຄອງດີດສົມ ແລະ ການຈັດໂຄງສ້າງທະນາຄານຄືນໃໝ່ທີ່ດີກວ່າ. ການສືບຕໍ່ຂະຫຍາຍໂຄງການສັກວັກຊີນໃຫ້ແກ່ມະຫາຊົນແມ່ນມີຄວາມຈຳເປັນເພື່ອຄວບຄຸມໂລກລະບາດ. ໃນປັດຈຸບັນ 52 ສ່ວນຮ້ອຍຂອງປະຊາກອນໄດ້ຖືກສັກຢາປ້ອງກັນຢ່າງຄົບຖ້ວນ ແລະ 63 ສ່ວນຮ້ອຍໄດ້ຮັບການສັກຢາໜຶ່ງຄັ້ງ. ສປປ ລາວ ໄດ້ຮັບປະກັນວ່າຈະມີວັກຊີນສັກໃຫ້ປະຊາຊົນຢ່າງພຽງພໍໃນກາງປີ 2022. ຖືວ່າໄດ້ຕາມແຜນການທີ່ຈະບັນລຸ 96 ສ່ວນຮ້ອຍຂອງປະຊາກອນພາຍໃນເດືອນມິຖຸນາ 2022. ໃນປັດຈຸບັນ 52 ສ່ວນຮ້ອຍຂອງປະຊາກອນໄດ້ຖືກສັກຢາປ້ອງກັນຢ່າງຄົບຖ້ວນ. ການເປີດດ່ານຊາຍແດນສາກົນຄືນໃໝ່ຈະຊ່ວຍບັນເທົາຜົນກະທົບດ້ານເສດຖະກິດຈາກໂຄວິດ-19[5].

30. **ການລະບາດຂອງພະຍາດໂຄວິດ-19 ໄດ້ເລີ່ມສົ່ງຜົນກະທົບທາງລົບຕໍ່ເສດຖະກິດຂອງ ສປປ ລາວ ໃນເດືອນ ມີນາ 2020.** ມາດຕະການສະກັດກັ້ນໄດ້ຈຳກັດການເຄື່ອນຍ້າຍການໄປມາຕາມຊາຍແດນເຮັດໃຫ້ຄວາມຕ້ອງການດ້ານການທ່ອງທ່ຽວ ແລະ ການບໍລິການການຕ້ອນຮັບຫຼຸດລົງຢ່າງຮ້າຍແຮງ ແລະ ຫຼຸດຜ່ອນການສົ່ງເງິນຄືນເຂົ້າປະເທດ ເນື່ອງຈາກແຮງງານທີ່ໄປເຮັດວຽກຢູ່ຕ່າງປະເທດໄດ້ກັບຄືນບ້ານ. ໃນຂະນະທີ່ມາດຕະການບັນເທົາຜົນກະທົບຂອງລັດຖະບານໄດ້ປະສົບຜົນສຳເລັດໃນການສະກັດກັ້ນໂລກລະ ບາດ, ມາຮອດວັນທີ 25 ມັງກອນ 2022, ມີ 130.293 ກໍລະນີທີ່ຖືກຢືນຢັນຕິດເຊື້ອ ແລະ 527 ຄົນເສຍຊີວິດ[6]. ການຫຼຸດລົງຂອງການຄ້າແລະການຊຸດຕົວລົງຂອງຂະແໜງການທ່ອງທ່ຽວໄດ້ລົບລ້າງຫຼາຍພັນຕຳແໜ່ງວຽກເຮັດງານທຳ ເປັນຜົນເຮັດໃຫ້ອັດຕາຄວາມທຸກຍາກເພີ່ມຂຶ້ນ.

31. **ລະຫວ່າງປີ 2012/13 ຫາ 2018/19 ອັດຕາຄວາມທຸກຍາກແຫ່ງຊາດໄດ້ຫຼຸດລົງຈາກ 23,4 ເປັນ 18 ສ່ວນຮ້ອຍ, ແຕ່ຄວາມບໍ່ສະເໝີພາບໄດ້ເພີ່ມຂຶ້ນ[7].** ບົດລາຍງານຄວາມທຸກຍາກຂອງການສຳຫຼວດການໃຊ້ຈ່າຍ ແລະ ການຊົມໃຊ້ຂອງຄົວເຮືອນຂອງ ສປປ ລາວ ສົກປີ 2018-2019 ໄດ້ໃຈ້ໃຫ້ເຫັນວ່າລາຍໄດ້ຂອງກະສິກອນໄດ້ເພີ່ມຂຶ້ນເນື່ອງຈາກການ

5. ຂໍ້ມູນກ່ຽວກັບອັດຕາການສັກວັກຊີນຈາກຄະນະປະຕິບັດງານຜູ້ນຳຈາກຫຼາຍຝ່າຍກ່ຽວກັບ COVID-19 https://data.covid19taskforce.com/data/countries/Lao%20PDR (ເຂົ້າເບິ່ງຄັ້ງວັນທີ 25 ມັງກອນ 2022)
6. WHO COVID-19 ການຕິດຕາມໃນລະດັບໂລກ https://covid19.who.int/region/wpro/country/la (ເຂົ້າເບິ່ງຄັ້ງວັນທີ 25 ມັງກອນ 2022)
7. ການປະເມີນຄວາມທຸກຍາກ ໂດຍທະນາຄານໂລກ https://www.worldbank.org/en/country/lao/publication/lao-pdr-poverty-profile-and-poverty-assessment-2020#:~:text=Poverty%20in%20Lao%20PDR%20has,percent %20during%20the%20same%20period

ຫັນສູ່ການຜະລິດເປັນສິນຄ້າ ເຊິ່ງເປັນຕົວຂັບເຄື່ອນຫຼັກຂອງການຫຼຸດຜ່ອນຄວາມທຸກຍາກ. ນັບແຕ່ປີ 2013 ເປັນຕົ້ນມາ, ຫລາຍຄອບຄົວກະສິກອນໄດ້ຫັນປ່ຽນຈາກການປູກເຂົ້າແບບກຸ້ມຕົນເອງໄປສູ່ການຜະລິດພືດສ້າງລາຍໄດ້ເປັນສິນຄ້າ. ພາກເໜືອ, ແຂວງບໍ່ແກ້ວ ໄດ້ຫຼຸດອັດຕາການເກີດຄວາມທຸກຍາກຈາກ 51,4 ເປັນ 19,4 ສ່ວນຮ້ອຍ ຈາກປີ 2013 ຫາ 2019 ຕາມລໍາດັບ. ການສົ່ງເງິນກັບປະເທດຂອງແຮງງານເຄື່ອນຍ້າຍທີ່ເພີ່ມຂຶ້ນເຖິງ 15% ຂອງລາຍຮັບຂອງຄົວເຮືອນໃນໄລຍະດຽວກັນກໍໄດ້ເປັນປັດໄຈໜຶ່ງໃຫ້ແກ່ການຫຼຸດຜ່ອນຄວາມທຸກຍາກ. ອັດຕາຄວາມທຸກຍາກໄດ້ຫຼຸດລົງຫລາຍກວ່າຢູ່ບັນດາແຂວງພາກໃຕ້ ແລະ ພາກເໜືອ ເຊິ່ງຊາວກະສິກອນຊົນນະບົດໄດ້ຮັບຜົນປະໂຫຍດຈາກການຜະລິດເປັນສິນຄ້າ ແລະ ການຄ້າຂ້າມຊາຍແດນທີ່ເພີ່ມຂຶ້ນ. ຄ່າສໍາປະສິດ Gini ເພີ່ມຂຶ້ນໃນທົດສະວັດທີ່ຜ່ານມາເຊິ່ງຊີ້ໃຫ້ເຫັນວ່າຄວາມບໍ່ສະເໝີພາບກໍໄດ້ເພີ່ມຂຶ້ນ. ຄວາມໝາຍໝັ້ນຂອງ GOL ໃນການຫຼຸດຜ່ອນຕົ້ນທຶນດ້ານການຄ້າ ແລະ ການປັບປຸງສະພາບແວດລ້ອມທີ່ເອື້ອອໍານວຍໃຫ້ທຸລະກິດເປັນການສະແຫວງຫາການສົ່ງເສີມການຂະຫຍາຍຕົວທາງດ້ານເສດຖະກິດເຊິ່ງມີຖານການເຕີບໂຕທີ່ກວ້າງແບບທົ່ວເຖິງກວ່າ.

32. **ອັດຕາຄວາມທຸກຍາກຫຼຸດລົງໄວໃນຄົວເຮືອນກະສິກອນຢູ່ໃກ້ກັບຊາຍແດນ.** ບັນດາແຂວງທີ່ຢູ່ຕິດກັບຊາຍແດນກໍາປູເຈຍ ແລະຫວຽດນາມ ໄດ້ບັນລຸການຫຼຸດຜ່ອນຄວາມທຸກຍາກ 15,5 ແລະ 11,6 ຕາມລໍາດັບ ໃນໄລຍະ 6 ປີທີ່ສິ້ນສຸດລົງໃນທ້າຍປີ 2019. ອັດຕາການຫຼຸດຜ່ອນຄວາມທຸກຍາກທີ່ສູງກວ່າຢ່າງຫຼວງຫຼາຍຢູ່ບັນດາແຂວງພາກເໜືອ ແລະ ພາກໃຕ້ຕິດກັບຊາຍແດນໄດ້ຊີ້ໃຫ້ເຫັນເຖິງຄວາມສໍາຄັນຂອງການຜະລິດກະສິກໍາເປັນສິນຄ້າ ແລະ ການຂະຫຍາຍການຄ້າຂ້າມຊາຍແດນຖືເປັນຕົວຂັບເຄື່ອນການຫຼຸດຜ່ອນຄວາມທຸກຍາກ.

## 2.2 ສະພາບແວດລ້ອມທີ່ເອື້ອອໍານວຍໃຫ້ທຸລະກິດ

33. **ສະພາບແວດລ້ອມທາງທຸລະກິດໃນ ສປປ ລາວ ຍັງຄົງມີຄວາມທ້າທາຍ.** ບົດລາຍງານການດໍາເນີນທຸລະກິດ (DB) ຂອງທະນາຄານໂລກປີ 2020 ຈັດອັນດັບປະເທດລາວຢູ່ທີ່ 154 ໃນຈໍານວນ 190 ປະເທດ (ເບິ່ງຮູບທີ 2.2). ອັນນີ້ເຮັດໃຫ້ ສປປ ລາວຖືກຈັດຢູ່ຫລັງບັນດາປະເທດເພື່ອນບ້ານໃກ້ຄຽງ ແລະ ບັນດາຄູ່ແຂ່ງຈໍານວນໜຶ່ງ ເຊັ່ນ ກໍາປູເຈຍ (144), ບູຖານ (89), ເນປານ (94), ຫວຽດນາມ (70), ໄທ (21), ປົດສະວານາ (87) ແລະສາທາລະນະລັດ ກີກກີສ (80). ຂໍ້ຍົກເວັ້ນແມ່ນມຽນມາທີ່ຢູ່ອັນດັບ 165.

**ຮູບ 2.2 ການດໍາເນີນທຸລະກິດ 2012, 2016 ແລະ 2020**




*ແຫລ່ງທີ່ມາ: ການດໍາເນີນທຸລະກິດ, 2020, ທະນາຄານໂລກ*

34. ຢູ່ ສປປ ລາວ ຕົ້ນທຶນໃນການດໍາເນີນທຸລະກິດຍັງສູງ. ເມື່ອເບິ່ງໃສ່ກັບບັນດາປະເທດທີ່ປຽບທຽບກັນໄດ້ ເຊິ່ງມີລະດັບການພັດທະນາທີ່ຄ້າຍຄືກັນ ໃນທົ່ວໂລກ ແລະ ພາກພື້ນອາຊີປາຊີຟິກ, ສປປ ລາວ ມີສະພາບແວດລ້ອມທາງທຸລະກິດທີ່ທ້າທາຍກວ່າ. ລັກສະນະທີ່ສໍາຄັນຂອງບັນຍາກາດການລົງທຶນຍັງຄົງມີລັກສະນະທີ່ການຂາດຄວາມໂປ່ງໃສແລະການຄາດຄະເນໄດ້ສໍາລັບນັກລົງທຶນ. ໄດ້ມີຫຼາຍວາລະການປະຕິຮູບເພື່ອພະຍາຍາມປັບປຸງການອໍານວຍຄວາມສະດວກດ້ານການລົງທຶນສໍາລັບການລົງທຶນຂອງຂະແໜງ ຊັບພະຍາກອນທໍາມະຊາດ, ຕົ້ນຕໍແມ່ນໂຄງການຂຸດຄົ້ນບໍ່ແຮ່ ແລະ ໄຟຟ້ານໍ້າຕົກ, ສ່ວນການຫັນໄປສູ່ຫລາຍຂະແໜງການທີ່ສ້າງວຽກເຮັດງານທໍາຫຼາຍກວ່ານັ້ນເຫັນວ່າບໍ່ທັນຖືກເນັ້ນໜັກເທົ່າທີ່ຄວນ. ໃນລັກສະ ນະດຽວກັນ, ມາຮອດປັດຈຸບັນ, ນັກລົງທຶນຊັບພະຍາກອນທໍາມະຊາດແມ່ນໄດ້ມີຄວາມສາມາດ

ໃນການເກັບຄືນໄດ້ຫລາຍຂື້ນດ້ານຄ່າໃຊ້ຈ່າຍທີ່ສູງໃນທຸລະກໍາການລົງທຶນຍ້ອນລາຍໄດ້ຈາກການນໍາໃຊ້ປັດໄຈແຫລ່ງຊັບພະຍາກອນທີ່ມີຂະໜາດໃຫຍ່ກວ່າແລະຈາກການຫລຸດຜ່ອນຕົ້ນທຶນສະເລ່ຍ(ການປະຢັດຈາກຂະໜາດ ). ຕົ້ນທຶນຄ່າໃຊ້ຈ່າຍທີ່ສູງຂອງ "ການດໍາເນີນທຸລະກິດ", ໃນຖານະເປັນສ່ວນແບ່ງຂອງຕົ້ນທຶນໃນການລົງທຶນຂອງທຸລະກິດ, ໄດ້ກາຍເປັນສິ່ງທີ່ບໍ່ກະຕຸກຊຸກຍູ້ສໍາລັບນັກລົງທຶນຂະໜາດນ້ອຍໃນການຫັນໄປສູ່ຂະ ແໜງການອື່ນໃຫ້ຫລາກຫລາຍໃນເສດຖະກິດ. ເຖິງແມ່ນຢູ່ໃນຂົງເຂດທີ່ ສປປ ລາວ ໄດ້ປະຕິບັດການປະຕິຮູບສະພາບແວດລ້ອມແຫ່ງການລົງທຶນ, ແຕ່ຂອງວາງກັບບັນດາປະເທດທີ່ເປັນຕົວປຽບທຽບຍັງບໍ່ທັນຖືກປິດລົງ ເນື່ອງຈາກການປະຕິຮູບກໍ່ໄດ້ປະຕິບັດຢູ່ບ່ອນອື່ນໃນພາກພື້ນເຊັ່ນກັນ.

35. **ການວັດປະສິດທິພາບຈາກບັນດາຕົວຊີ້ວັດຕ່າງໆຂອງການດໍາເນີນທຸລະກິດຂອງ ສປປ ລາວ ແມ່ນບໍ່ສະໝໍ່າສະເໝີກັນ.** ອັນດັບທີ່ສູງທີ່ສຸດແມ່ນການຄ້າຂ້າມຊາຍແດນ ເຊິ່ງ ສປປ ລາວ ຖືກຈັດຢູ່ໃນອັນດັບທີ 78 ໃນຈໍານວນ 190. ອັນດັບຕໍ່າສຸດໃນທີ່ນີ້ ແມ່ນ 181 ສໍາລັບການເລີ່ມຕົ້ນທຸລະກິດ. ຕາມມາໂດຍອັນດັບ 179 ສໍາລັບການປົກປ້ອງນັກລົງທຶນ ແລະການຈັດປະເພດ "ບໍ່ມີການປະຕິບັດ" ໃນການແກ້ໄຂບັນຫາການລົ້ມລະລາຍ/ຄວາມບໍ່ສາມາດຊໍາລະໜີ້ສິນ (168).

## ຮູບ 2.3 ການຈັດລະດັບການດໍາເນີນທຸລະກິດ ສໍາລັບ ສປປ ລາວ




*ແຫລ່ງທີ່ມາ: ການດໍາເນີນທຸລະກິດ, 2020, ທະນາຄານໂລກ*

*ໝາຍເຫດ:*

1. *ແກນນອນຈາກຊ້າຍໄປຂວາ: 1. ການແກ້ໄຂການລົ້ມລະລາຍ, 2. ການບັງຄັບໃຊ້ຂໍ້ຜູກພັນສັນຍາ, 3. ການຄ້າຂ້າມຊາຍແດນ, 4. ການຊໍາລະອາກອນ, 5. ການປົກປ້ອງຜູ້ລົງທຶນຂະໜາດນ້ອຍ, 6. ການໄດ້ສິນເຊື່ອ, 7. ການຈົດທະບຽນຊັບສິນ, 8. ການເອົາໄຟຟ້າເຂົ້າກິດຈະການ, 9. ການຂໍອະນຸຍາດປຸກສ້າງ, 10. ການເລີ່ມຕົ້ນທຸລະກິດ, 11. ຄວາມສະດວກໃນການເຮັດທຸລະກິດ*

2. *ສີເທົາ ແມ່ນການເຮັດທຸລະກິດ ປີ 2020, ສີສົ້ມ ແມ່ນການເຮັດທຸລະກິດ ປີ 2020.*

36. **ການເລີ່ມຕົ້ນທຸລະກິດໃຊ້ເວລາ 6 ເດືອນ.** ອີງຕາມບົດລາຍງານການດໍາເນີນທຸລະກິດປີ 2020, ມັນໃຊ້ເວລາ 173 ວັນ ເພື່ອເຮັດສໍາເລັດ 9 ຂັ້ນຕອນທີ່ຕ້ອງການເພື່ອເລີ່ມທຸລະກິດໃນ ສປປ ລາວ. ແນວໃດກໍ່ດີ, ໂດຍໄດ້ຮັບການສະໜັບສະໜູນຢ່າງແຂງແຮງຈາກຂັ້ນສູງສຸດໃນລັດຖະບານ, ບັນດາມາດຕະການປະຕິຮູບການດໍາເນີນທຸລະກິດທີ່ຕໍ່ເນື່ອງໃນປີ 2020 ຄາດຫວັງວ່າຈະມີການປັບປຸງໃນບັນດາຕົວຊີ້ວັດຄື: ການເລີ່ມ ຕົ້ນທຸລະກິດ, ການເສຍອາກອນ, ການຄ້າຂ້າມຊາຍແດນ, ແລະ ການແກ້ໄຂການບໍ່ສາມາດຊໍາລະໜີ້.

37. **GOL ມຸ່ງໝັ້ນທີ່ຈະປັບປຸງສະພາບແວດລ້ອມທາງທຸລະກິດ.** ໃນປີທີ່ຜ່ານມາໄດ້ດໍາເນີນຄວາມພະຍາຍາມທີ່ສໍາຄັນ ແລະຕໍ່ເນື່ອງໃນຖານະເປັນສ່ວນໜຶ່ງຂອງການປະຕິຮູບສະພາບແວດລ້ອມທາງທຸລະກິດທີ່ກວ້າງຂວາງກວ່າ. ທັງນີ້, ໄດ້ເຮັດໃຫ້ມີການຫຼຸດຈໍານວນຂັ້ນຕອນລົງເຫຼືອພຽງ 3 ຂັ້ນຕອນ ຈາກ 9 ຂັ້ນຕອນຜ່ານມາ ແລະ ກໍານົດເວລາຕາມກົດໝາຍມາເປັນ 17 ວັນເຮັດວຽກ, ໃນນັ້ນ 10 ວັນ ແມ່ນສໍາລັບການຂຶ້ນທະບຽນວິສາຫະກິດ, 5 ວັນສໍາລັບການຄວັດຕາ ແລະ ອະນຸມັດຕາປະທັບ ແລະ 2 ວັນສໍາລັບການຂຶ້ນທະບຽນປະກັນສັງຄົມ. ຖ້າຫາກວ່າມາດຕະການປະຕິຮູບໃໝ່ໄດ້ຮັບການ

ປະຕິບັດຢ່າງຄືບຖ້ວນຢູ່ທ້ອງຖິ່ນ, ການຈັດອັນດັບການດຳເນີນທຸລະກິດຂອງ ສປປ ລາວ ກໍ່ໜ້າຈະຖືກປັບປຸງ.

**ຮູບ 2.4 ການເລີ່ມຕົ້ນທຸລະກິດ ຈາກບົດລາຍງານການເຮັດທຸລະກິດ ປີ 2020**




*ແຫຼ່ງທີ່ມາ: ການເຮັດທຸລະກິດ, 2020, ທະນາຄານໂລກ*

*ໝາຍເຫດ: - ແກນນອນຈາກຊ້າຍໄປຂວາ: 1. ສປປ ລາວ, 2. ກໍາປູເຈຍ, 3. ບູຖານ, 4. ບົດສະວານາ, 5. ມຽນມາ, 6. ເນປານ, 7. ໄທ, 8. ຫວຽດນາມ, 9. ສາທາລະນະລັດກີກີສ*

*- ແກນຕັ້ງຂ້າງຊ້າຍແມ່ນຈໍານວນວັນ, ຂ້າງຂວາແມ່ນ ອັນດັບທີ*

38. **GOL ກໍາລັງຈັດລໍາດັບຄວາມສໍາຄັນຂອງຕົວຊີ້ວັດສະເພາະຂອງການດໍາເນີນທຸລະກິດ.** ເພື່ອປັບປຸງສະພາບແວດລ້ອມແຫ່ງການດໍາເນີນທຸລະກິດ, ລັດຖະບານໄດ້ກໍານົດເອົາຕົວຊີ້ວັດຫຼາຍໆຕົວເປັນບຸລິມະສິດສູງ, ທີ່ຄາດຫວັງວ່າຈະໄດ້ຮັບໝາກຜົນການປະຕິຮູບອອກມາເປັນຕົວເປັນຕົນ ຄືຕົວຢ່າງ: ການເລີ່ມຕົ້ນທຸລະກິດ, ການຂໍອະນຸຍາດປຸກສ້າງ, ການຄ້າລະຫວ່າງປະເທດ, ການເສຍອາກອນ, ການຂໍໃຊ້ໄຟຟ້າ. ຕົວຊີ້ວັດອາດຈະບັນລຸໄດ້ໃນໄລຍະກາງສໍາລັບຂົງເຂດການຈົດທະບຽນຊັບສິນ, ການໄດ້ຮັບສິນເຊື່ອ ແລະການປົກປ້ອງນັກລົງທຶນລາຍນ້ອຍ. ການປະຕິຮູບໃນຂົງເຂດການບັງຄັບໃຫ້ເປັນໄປຕາມຂໍ້ຜູກພັນສັນຍາ ແລະ ການແກ້ໄຂການບໍ່ສາມາດຊໍາລະໜີ້ສິນ/ການລົ້ມລະລາຍ ອາດຈະເປັນໄດ້ໃນໄລຍະຍາວກວ່າ ແລະ ຈະຮຽກຮ້ອງໃຫ້ມີການນໍາພາທີ່ເຂັ້ມແຂງທາງການເມືອງຈາກຂັ້ນເທິງ.

39. **ຄວາມສໍາຄັນຂອງການໃຊ້ປະໂຫຍດຈາກກາລະໂອກາດຂອງການປະຕິຮູບ.** ມີຫຼາຍໂອກາດສໍາລັບການປະຕິຮູບ. ຮ່າງແຜນດໍາເນີນງານການພັດທະນາຂະແໜງການຄ້າ ແລະ ພາກທຸລະກິດເອກະຊົນໄດ້ສັງລວມຂໍ້ສະເໜີແນະການປະຕິຮູບໂດຍພິຈາລະນາຄວາມສະດວກໃນການຈັດຕັ້ງປະຕິບັດແລະຂອບເຂດຂອງການປະຕິຮູບທີ່ໄດ້ດໍາເນີນໄປແລ້ວ. ການປະຕິຮູບທີ່ໄດ້ສະເໜີເພື່ອແນໃສ່ສ້າງຄວາມເຂັ້ມແຂງໃຫ້ແກ່ສະພາບແວດລ້ອມແຫ່ງການດໍາເນີນທຸລະກິດ ແລະ ມີຄວາມເອື້ອອໍານວຍໃຫ້ແກ່ການເຕີບໂຕດ້ານເສດຖະກິດ ແລະ ການພັດທະນາພາກເອກະຊົນ.

40. **ບົດຮຽນຈາກການປັບປຸງສະພາບແວດລ້ອມທາງທຸລະກິດ.** ລັດຖະບານທີ່ປະສົບຜົນສໍາເລັດໃນໂຄງການປະຕິຮູບແບບຍືນຍົງ, ຕາມການວັດແທກໂດຍ ບົດລາຍງານການເຮັດທຸລະກິດ ແລະບັນດາດັດຊະນີສາກົນອື່ນໆ, ມີທ່າອ່ຽງທີ່ຈະມີລັກສະນະຄ້າຍຄືກັນທົ່ວໄປ. ກ່ອນອື່ນໝົດ, ພວກເພິ່ນໃຊ້ວິທີແບບຄົບຖ້ວນກວມລວມເຊິ່ງແນໃສ່ປັບປຸງໃນຫຼາຍໆຂົງເຂດຂອງເສດຖະກິດ; ພວກເພິ່ນນໍາໃຊ້ຕົວຊີ້ວັດທີ່ມີຢູ່ແລ້ວເພື່ອກໍານົດໂອກາດໃນການປັບປຸງ, ຮຽນຮູ້ຈາກປະເທດອື່ນໆແລະວັດແທກຄວາມຄືບໜ້າການປະຕິຮູບ. ບັນດາປະເທດເຫຼົ່ານີ້ເຫັນວ່າ ການປັບປຸງບັນຍາກາດແຫ່ງການລົງທຶນເປັນສິ່ງຈໍາເປັນເພື່ອຮັກສາຄວາມສາມາດແກ່ງແຍ້ງໃນສະພາບເສດຖະກິດທີ່ຫຍຸ້ງຍາກ.

41. **ການປະຕິຮູບທຸລະກິດຍັງລວມເຖິງການສ້າງຄວາມເຂັ້ມແຂງດ້ານທຶນຮອນມະນຸດ, ການນໍາໃຊ້ເຕັກໂນໂລຊີໃໝ່ ແລະ ການເຮັດໃຫ້ຂອດ/ຂັ້ນ ຂອງການບໍລິຫານມີຄວາມກະທັດຮັດ.** ການປັບປຸງປະສິດທິພາບໃນການບໍລິການຂອງພາກລັດແມ່ນບໍ່ຈໍາກັດພຽງແຕ່ການປັບປຸງລະບຽບການ. ມີຫຼາຍອັນສາມາດບັນລຸໄດ້ໂດຍການລົງທຶນຫຼາຍຂຶ້ນໃນທຶນຮອນມະນຸດ ແລະໂດຍການນໍາໃຊ້ວິທີແກ້ໄຂທາງເອເລັກໂຕຣນິກທີ່ທັນສະໄໝ ໃນການໃຫ້ບໍລິການສາທາລະນະທີ່ມີປະສິດທິພາບ ແລະ ແບບທີ່ເນັ້ນການໃຫ້ມີຜົນງານອອກມາ. ລັດຖະບານມັກຈະໃຊ້ການປະຕິຮູບເພື່ອປັບປຸງຜົນງານການເຄື່ອນໄຫວໃນຂົງເຂດຕ່າງໆທີ່ກວມເອົາໃນບົດລາຍງານການເຮັດທຸລະກິດ ແລະ ບັນດາດັດຊະນີສາກົນອື່ນໆທີ່ເປັນເປົ້າ

ສາຍຕາຂອງສາທາລະນະຊົນ (ເຊັ່ນ: ເວທີພົບປະເສດຖະກິດໂລກ World Economic Forum) ໃນຖານະເປັນໂອກາດທີ່ຈະປະຕິຮູບແລະທັນເປັນທັນສະໄໝບັນດາລະບົບແລະຂັ້ນຕອນທີ່ບໍ່ທັນກັບຍຸກກັບສະພາບອີກຕໍ່ໄປດ້ວຍບັນດາເຕັກໂນ ໂລຊີທີ່ທັນສະໄໝ. ການຝຶກອົບຮົມພະນັກງານລັດໃຫ້ແຂ່ງຂັນໄດ້ກັບພະນັກງານພາກເອກະຊົນເປັນການຊ່ວຍຫຼຸດຜ່ອນຊ່ອງວ່າງທາງສັງຄົມລະຫວ່າງສອງຂະແໜງການ. ວິທີແກ້ໄຂທາງເອເລັກໂຕຣນິກແລະອອນລາຍເປັນການທົດແທນລະບົບເຈຍສໍ, ໃຫ້ການບໍລິການສາທາລະນະທີ່ມີປະສິດທິພາບ, ໂປ່ງໃສ ແລະໄວຂຶ້ນ.

**ການຄ້າຂ້າມຊາຍແດນ**

42. **ສປປ ລາວ ໄດ້ຫຼຸດຜ່ອນຄວາມຕ້ອງການດ້ານເອກະສານ, ແຕ່ຄ່າໃຊ້ຈ່າຍໃນການສົ່ງອອກຍັງຄົງສູງກວ່າບັນດາເສດຖະກິດທີ່ໃຊ້ເປັນຕົວປຽບທຽບໃນພາກພື້ນ.** ຕົວເລກ 2,5 ແລະ 2,6 ສະແດງໃຫ້ເຫັນວ່າ ສປປ ລາວ ປຽບທຽບໄດ້ແນວໃດກັບບັນດາເສດຖະກິດທີ່ໃຊ້ເປັນຕົວປຽບທຽບໃນທົ່ວໂລກ ແລະ ໃນພາກພື້ນໃນອາຊີ-ປາຊີຟິກ ທາງດ້ານເວລາ ແລະຄ່າໃຊ້ຈ່າຍຂອງການຄ້າຂ້າມຊາຍແດນ. ສປປ ລາວ ໄດ້ຕັດຮອນຄວາມຮຽກຮ້ອງຕ້ອງການໂດຍການຫຼຸດຜ່ອນຈຳນວນການຍື່ນເອກະສານທີ່ຕ້ອງການສຳລັບການສົ່ງອອກແລະນຳເຂົ້າ (ປັດຈຸບັນ 9 ແລະ 10 ຕາມລຳດັບ) ພ້ອມທັງຫຼຸດຜ່ອນເວລາໃນການຜ່ານດ່ານພາສີ.

## ຮູບ 2.5 ການຄ້າຂ້າມຊາຍແດນ ຢູ່ ສປປ ລາວ ແລະ ບັນດາເສດຖະກິດທີ່ມີການສົມທຽບກັນ-ການຈັດລະດັບ




*ແຫລ່ງທີ່ມາ: ການເຮັດທຸລະກິດ, 2020, ທະນາຄານໂລກ*

## ຮູບ 2.6 ການຄ້າຂ້າມຊາຍແດນ ຢູ່ ສປປ ລາວ 2020 – ເວລາ ແລະ ຄ່າໃຊ້ຈ່າຍ




*ແຫລ່ງທີ່ມາ: ການເຮັດທຸລະກິດ,2020, ທະນາຄານໂລກ.* ໝາຍເຫດ: ສີຟ້າ ແມ່ນ ເວລາ(ຊົ່ວໂມງ); ສີແດງ(ໂດລາສະຫະລັດ)

**ລະບອບອາກອນ**

43. **ລະບອບອາກອນທຸລະກິດຖືກຈັດອັນດັບດີແບບທຽບຖານ.** ເມື່ອປຽບທຽບກັບຕົວຊີ້ວັດອື່ນໆຂອງການດຳເນີນທຸລະກິດ, ລະບອບອາກອນໃນ ສປປ ລາວ ແມ່ນຂ້ອນຂ້າງເອື້ອອຳນວຍໃຫ້ແກ່ວິສາຫະກິດ. ນັບແຕ່ປີ 2018 ເປັນຕົ້ນມາ, ລັດຖະບານລາວໄດ້ອອກຄຳສັ່ງສະບັບເລກທີ 02/ນຍ ວ່າດ້ວຍການປັບປຸງບັນດາລະບຽບການ ແລະ ກົນໄກການປະສານງານໃນການດຳເນີນທຸລະກິດຢູ່ ສປປ ລາວ,ເຊິ່ງໄດ້ລວມເອົາບັນດາຕົວຊີ້ວັດທີ່ກ່ຽວຂ້ອງກັບຂະແໜງການເງິນ. ປະຕິບັດຕາມຄຳສັ່ງດັ່ງກ່າວ, ກະຊວງການເງິນໄດ້ຜັນຂະຫຍາຍ ແລະ ປັບປຸງບັນດານິຕິກຳຕ່າງໆທີ່ກ່ຽວຂ້ອງເຖິງຂະແໜງການເງິນ, ລວມທັງກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ, ການຄຸ້ມຄອງສ່ວຍສາອາກອນ, ອາກອນຊົມໃຊ້, ອາກອນລາຍໄດ້ ແລະ ນິຕິກຳສຳຮອງອື່ນໆ.

**ຮູບ 2.7 ການຈັດອັນດັບດ້ານການຊຳລະອາກອນ ແລະ ອາກອນກຳໄລ (ສ່ວນຮ້ອຍ) ໃນການດຳເນີນທຸລະກິດ 2020**




*ແຫຼ່ງທີ່ມາ: ການເຮັດທຸລະກິດ, 2020, ທະນາຄານໂລກ;*

*ໝາຍເຫດ: ແກນຕັ້ງຂ້າງຊ້າຍ ແມ່ນອາກອນກຳໄລ(%), ແກນຕັ້ງຂ້າງຂວາແມ່ນອັນດັບທີ*

## 2.3 ການຈັດຕັ້ງປະຕິບັດບົດ DTIS ສະບັບປັບປຸງ 2012

44. **ບົດ DTIS ສະບັບປັບປຸງກ່ອນນີ້ ໄດ້ຖືກຈັດພິມໃນເດືອນກໍລະກົດ 2012.** ພາຍຫຼັງມີການອະນຸມັດ ບັນທຶກແນວຄວາມຄິດ DTIS ໃນເດືອນກຸມພາ 2011, ໄດ້ມີການກະກຽມບົດລາຍງານຕົ້ນຕໍ ໃນໄລຍະ 16 ເດືອນຕໍ່ມາ. ໄລຍະທີ່ຍາວນານດັ່ງກ່າວໄດ້ເຮັດໃຫ້ສາມາດປຶກສາຫາລືຫລາຍຄັ້ງກັບບັນດາພາກສ່ວນກ່ຽວຂ້ອງຢູ່ນະຄອນຫຼວງວຽງຈັນ ແລະ ຫຼວງພະບາງ, ໂດຍມີການເຂົ້າຮ່ວມຈາກພາກລັດ, ພາກເອກະຊົນ, ສັງຄົມພົນລະເຮືອນ, ແລະ ຄູ່ຮ່ວມມືສາກົນ. ແຜນດຳເນີນງານການຄ້າ ແລະ ພາກເອກະຊົນ ໄດ້ຖືກສະ ເໜີ ແລະ ຮັບຮອງໃນກອງປະຊຸມຢູ່ຂັ້ນສູນກາງເພື່ອຜ່ານຄວາມຖືກຕ້ອງຂອງບົດ ທີ່ນະຄອນຫຼວງວຽງຈັນ ໃນເດືອນພຶດສະພາ 2012.

45. **ບົດ DTIS 2012 ໄດ້ກຳນົດຊ່ອງທາງເພື່ອສົ່ງເສີມຄວາມຫຼາກຫຼາຍທາງດ້ານເສດຖະກິດ ແລະການສ້າງວຽກເຮັດງານທຳ.** ການທີ່ ສປປ ລາວ ເອື່ອຍອີງການສົ່ງອອກຊັບພະຍາກອນທຳມະຊາດໄດ້ຖືວ່າເປັນຂໍ້ຈຳກັດຕໍ່ການເພີ່ມຄວາມຫຼາກຫຼາຍທາງດ້ານເສດຖະກິດ, ການສ້າງວຽກເຮັດງານທຳ ແລະ ການຫັນໄປສູ່ການຂະຫຍາຍຕົວທີ່ສະເໝີພາບ ແລະ ຍືນຍົງກວ່າ. ເງິນທຶນຂະໜາດໃຫຍ່ທີ່ເຂົ້າຂະແໜງການບໍ່ແຮແລະພະລັງງານໄດ້ຊຸກຍູ້ການເຕີບໂຕ GDP, ເປັນການຊ່ວຍໜູນອັດຕາແລກປ່ຽນ, ແຕ່ໄດ້ສ້າງວຽກເຮັດງານທຳບໍ່ຫລາຍ. ຂໍ້ສະເໜີແນະຂອງບົດ DTIS ໄດ້ລະບຸເປົ້າໝາຍກວ້າງໆສາມຢ່າງທີ່ຈຳເປັນເພື່ອຫຼຸດຜ່ອນຄວາມທຸກຍາກ ແລະ ສົ່ງເສີມການເຕີບໂຕທາງເສດຖະກິດທີ່ມີພື້ນຖານທີ່ກວ້າງທີ່ສຸດ: (i) ການປັບປຸງສະພາບແວດລ້ອມທາງທຸລະກິດ ແລະ ການຄ້າ. (ii) ການເພີ່ມຜະລິດຕະພາບ ແລະ ຄວາມສາມາດແກ່ງແຍ່ງແຂ່ງຂັນໃນທຸລະກິດກະສິກຳ, ອຸດສາຫະກຳປຸງແຕ່ງ ແລະ ການບໍລິການ (ໂດຍໃຫ້ບຸລິມະສິດການທ່ອງທ່ຽວ). (iii) ການເຊື່ອມສານດ້ານການຄ້າແລະການພັດທະນາພາກເອກະຊົນເຂົ້າໃນກະແສຫລັກຂອງການພັດທະນາໂດຍຜ່ານການເສີມສ້າງຂອບການຄຸ້ມຄອງການຊ່ວຍເຫຼືອທາງດ້ານການຄ້າ (A4T).

46. **ສປປ ລາວ ໄດ້ຮັບການສະໜັບສະໜູນຈາກຜູ້ໃຫ້ທຶນຫຼາຍພາກສ່ວນເພື່ອຈັດຕັ້ງປະຕິບັດ ຂໍ້ສະເໜີແນະຫຼາຍໆຂໍ້ໃນບົດ DTIS ປີ 2012.** ໃນນີ້, ລວມມີການສະໜັບສະໜູນດ້ານວິຊາການໃຫ້ແກ່ກະຊວງອຸດສາຫະກໍາ ແລະ ການຄ້າ (MOIC) ເພື່ອສະໜັບສະໜູນບັນດາກິດຈະກໍາການເຄື່ອນໄຫວຫລາຍໆຢ່າງ ເພື່ອແນໃສ່ຫຼຸດຜ່ອນຕົ້ນທຶນທາງການຄ້າ ໂດຍຜ່ານການປັບປຸງຄວາມໂປ່ງໃສ ແລະ ການຄາດຄະເນໄດ້, ແລະ ເພື່ອເຮັດໃຫ້ລະບຽບວິທີປະຕິບັດຂອງການຄ້າງ່າຍຂຶ້ນ ແລະ ເປັນມາດຕະຖານດຽວກັນ. ຄະນະກໍາມະການອໍານວຍຄວາມສະດວກດ້ານການຄ້າແຫ່ງຊາດ (NTFC) ໄດ້ຮັບການສ້າງຕັ້ງຂຶ້ນໃນປີ 2018 ແລະ ໂຄງການຊ່ວຍເຫລືອພັດທະນາການຄ້າຄັ້ງທີ 2 ຂອງທະນາຄານໂລກ (TDP) ໄດ້ສະໜັບສະໜູນກອງເລຂາອໍານວຍຄວາມສະດວກດ້ານການຄ້າ. ຄວາມໂປ່ງໃສ ແລະການເຂົ້າເຖິງຂໍ້ມູນຂ່າວສານໄດ້ຮັບການປະຕິບັດດ້ວຍການສ້າງຕັ້ງສູນຂໍ້ມູນຂ່າວສານການຄ້າແຫ່ງຊາດ (NTP), ການກະກຽມແຜນດໍາເນີນງານການອໍານວຍຄວາມສະດວກທາງດ້ານການຄ້າ (2017-2023), ແລະການສ້າງແຜນວາດແລະການພິມເຜີຍແຜ່ທຸກໆມາດຕະການກີດກັນການຄ້າທີ່ບໍ່ແມ່ນພາສີ (NTM). ຢ່າງໃດກໍຕາມ, ເຫັນວ່າຍັງບໍ່ຄືບໜ້າເທົ່າທີ່ຄວນໃນການປັບປຸງປ່ຽນແປງລະບຽບລະບຽບການແລະຂັ້ນຕອນເພື່ອລຶບລ້າງສິ່ງທີ່ບໍ່ຈໍາເປັນ ແລະຄ່າໃຊ້ຈ່າຍທີ່ຍັງສູງໃນການປະຕິບັດຕາມ.

47. **ການສະໜັບສະໜູນຈາກຜູ້ໃຫ້ທຶນຫຼາຍຝ່າຍ ໄດ້ເຮັດໃຫ້ເກີດການຊ່ວຍເຫຼືອດ້ານວິຊາການ ແລະ ການສ້າງຂີດຄວາມສາມາດ ແຕ່ມີການປະຕິຮູບພຽງເລັກນ້ອຍ.** ການຊ່ວຍເຫຼືອທີ່ມີຄວາມສໍາຄັນຈາກຜູ້ໃຫ້ທຶນ ແກ່ MOIC ແລະພະແນກຄຸ້ມຄອງການຈັດຕັ້ງປະຕິບັດໂຄງການຊ່ວຍເຫລືອຕ່າງປະເທດໄດ້ສ້າງຂີດຄວາມສາມາດຜ່ານການຝຶກອົບຮົມ, ການກະກຽມບົດລາຍງານດ້ານວິຊາການທີ່ມີຄຸນນະພາບສູງຈໍານວນຫລາຍລວມທັງມີແຜນການປະຕິບັດງານແລະຍຸດທະສາດການຈັດຕັ້ງປະຕິບັດຢ່າງລະອຽດ ແລະ ການກະ ກຽມຮ່າງນິຕິກໍາ. ການໃຫ້ຄໍາໝັ້ນສັນຍາໃນດ້ານຄວາມໂປ່ງໃສ ແລະ ການເພີ່ມການເອົາເຂົ້າມາຮ່ວມງານ ແລະ ການປຶກສາຫາລືກັບພາກເອກະຊົນໄດ້ກ້າວໄປເຖິງການເປີດກອງປະຊຸມທຸລະກິດລາວຄືນໃໝ່ທີ່ທົ່ວເຖິງກວ່າ ໃນປີ 2017 ແລະ 2018. ໄດ້ຮັບການອໍານວຍຄວາມສະດວກຈາກການສ້າງຕັ້ງໜ່ວຍຂະແໜງ ການຄ້າ ແລະ ພາກທຸລະກິດເອກະຊົນ (TPSWG) ຢ່າງເປັນທາງການ ໂດຍການເປັນປະທານຮ່ວມຂອງລັດຖະມົນຕີກະຊວງການຄ້າ ແລະ ເອກອັກຄະລັດຖະທູດຜູ້ປະສານງານຂອງຜູ້ໃຫ້ທຶນ, ໂດຍມີ NIU ເປັນກອງເລຂານຸການ. ແນວໃດກໍ່ດີ, ໃນໄລຍະ 2013-2019, ໃນຂະນະທີ່ເສດຖະກິດພວມມີການເຕີບໂຕຢ່າງວ່ອງໄວ, ການປະຕິຮູບທີ່ຮຽກຮ້ອງໃຫ້ມີການປ່ຽນແປງໃໝ່ດ້ານກົດໝາຍ ແລະ ລະບຽບການໃໝ່ສ່ວນໃຫຍ່ແມ່ນຖືກຢຸດກາງຄັນ.

48. **ປັດຈຸບັນກໍາລັງດໍາເນີນໂຄງການສົ່ງເສີມຄວາມສາມາດແຂ່ງຂັນ ແລະ ການຄ້າຂອງ ສປປ ລາວ (LCTP) ທີ່ມີຜູ້ໃຫ້ທຶນຫຼາຍຝ່າຍ ຢູ່ ເພື່ອ "ເຮັດໃຫ້ລະບຽບການດໍາເນີນທຸລະກິດງ່າຍຂຶ້ນ, ອໍານວຍຄວາມສະດວກທາງດ້ານການຄ້າ ແລະ ປັບປຸງຄວາມສາມາດການແຂ່ງຂັນໃນລະດັບບໍລິສັດ".** ໂດຍມີການໃຫ້ທຶນຈາກທະນາຄານໂລກ, ການຊ່ວຍເຫຼືອອົດສະຕຣາລີ, ການຊ່ວຍເຫລືອຂອງປະເທດອັງກິດ ແລະ USAID, LCTP ໄດ້ເລີ່ມຈັດຕັ້ງປະຕິບັດໃນເດືອນທັນວາ 2018 ແລະກໍານົດຈະດໍາເນີນການເປັນເວລາ 4 ປີ ໂດຍມີ MOIC ເປັນອົງການຈັດຕັ້ງປະຕິບັດຫລັກ. LCTP ໄດ້ຖືກຂະຫຍາຍອອກໄປ ແລະ ປັດຈຸບັນໄດ້ກໍານົດຈະດໍາເນີນການໄປຈົນເຖິງເດືອນທັນວາ 2024. ໄດ້ມີການຈັດຕັ້ງປີ່ນອ້ອມສີ່ສ່ວນປະກອບຄື: ເສົາຄໍ້າ A ການປັບປຸງສະພາບແວດລ້ອມໃນການດໍາເນີນທຸລະກິດ, ເສົາຄໍ້າ B ການອໍານວຍຄວາມສະດວກທາງດ້ານການຄ້າ ແລະການເຊື່ອມຕໍ່ກັບຕະຫຼາດ, ເສົາຄໍ້າ C ການປັບປຸງຄວາມສາມາດ ການແຂ່ງຂັນໃນລະດັບວິສາຫະກິດ, ແລະເສົາຄໍ້າ D ສະໜັບສະໜູນໃຫ້ມີນະໂຍບາຍທີ່ດີຂຶ້ນ ແລະ ທົ່ວເຖິງກວ່າເກົ່າ.

49. **ການເຕີບໂຕທາງເສດຖະກິດຫຼຸດລົງກ່ອນການແຜ່ລະບາດຂອງພະຍາດໂຄວິດ-19.** ນັບແຕ່ປີ 2019 ເປັນຕົ້ນມາ, ເມື່ອໂຄງການກໍ່ສ້າງຂະໜາດໃຫຍ່ຈໍານວນໜຶ່ງໄດ້ສ້າງສໍາເລັດ, ການລົງທຶນຈາກຕ່າງປະເທດ ແລະ ມູນຄ່າການນໍາເຂົ້າແມ່ນໄດ້ຫຼຸດລົງ, ເຮັດໃຫ້ທ່າອ່ຽງຂອງຈັງຫວະການເຕີບໂຕຂອງເສດຖະກິດກໍ່ຊ້າລົງ.

50. **ການລະບາດຂອງພະຍາດໂຄວິດ-19 ເລີ່ມສົ່ງຜົນກະທົບທາງລົບຕໍ່ເສດຖະກິດຂອງ ສປປ ລາວ ໃນເດືອນ ມີນາ 2020.** ມາດຕະການສະກັດກັ້ນໄດ້ຈໍາກັດການເຄື່ອນໄຫວໄປມາຜ່ານຊາຍແດນ, ເຮັດໃຫ້ຄວາມຕ້ອງການດ້ານການທ່ອງທ່ຽວ ແລະ ການບໍລິການຕ້ອນຮັບຫຼຸດລົງຢ່າງຮ້າຍແຮງ ລວມທັງການສົ່ງເງິນຄືນປະເທດກໍ່ຫຼຸດລົງຍ້ອນແຮງງານໄປເຮັດວຽກຢູ່ຕ່າງປະເທດໄດ້ກັບຄືນບ້ານ. ໃນເບື້ອງຕົ້ນຜົນກະທົບຕົ້ນຕໍແມ່ນມີຕໍ່ເສດຖະກິດຍ້ອນວ່າຈໍານວນກໍລະນີທີ່ໄດ້ລາຍງານແມ່ນຕໍ່າທີ່ສຸດ; ແນວໃດກໍ່ຕາມ, ດ້ວຍອັດ ຕາການສັກຢາກັນພະຍາດທີ່ຕໍ່າ, ປະເທດລາວຍັງມີຄວາມບອບບາງຢູ່. ໃນເດືອນ ເມສາ 2021, ພາຍຫຼັງມີງານຊຸມນຸມຊົນອັນໃຫຍ່ຫຼວງໃນງານເທດສະການປີໃໝ່ລາວ ແລະ ງານສົງການຂອງໄທ, ສປປ ລາວ ເລີ່ມປະສົບກັບໄພລະບາດຄັ້ງທີສອງ ແລະ ລັດຖະບານໄດ້ວາງຂໍ້ຈໍາກັດການປິດເມືອງຈົນຮອດວັນທີ 18 ສິງຫາ 2021. ມາຮອດກາງເດືອນສິງຫາ 2021, ສປປ ລາວ ໄດ້ມີ ການລາຍງານພຽງແຕ່ 10.000 ກວ່າກໍລະນີທີ່ຖືກຢືນຢັນແລະມີ 10 ຄົນເສຍຊີວິດ. ມາຮອດກາງເດືອນມັງກອນ 2022, ເນື່ອງຈາກການແຜ່ກະຈາຍຂອງສາຍພັນໂອໄມຄຣອນ, ຈໍານວນກໍລະນີສະສົມໄດ້ເພີ່ມຂຶ້ນເກີນ 100.000 ແລະມີຜູ້ເສຍຊີວິດຫຼາຍກວ່າ 500 ຄົນ. ການຫຼຸດລົງຂອງການຄ້າແລະການຊຸດຕົວລົງຂອງຂະແໜງການທ່ອງທ່ຽວໄດ້ລົບລ້າງຫຼາຍພັນຕໍາແໜ່ງວຽກເຮັດງານທໍາເຮັດໃຫ້ອັດຕາຄວາມທຸກຍາກເພີ່ມຂຶ້ນ. ຂໍ້ຈໍາກັດການປິດເມືອງທີ່ຂະຫຍາຍອອກໄປຈົນຮອດເດືອນມິຖຸນາຫາເດືອນສິງຫາ 2021 ໄດ້ເຮັດໃຫ້ການໃຫ້ບໍລິການຂອງພາກລັດກໍ່ຊ້າລົງ.

51. **ແຜນດໍາເນີນງານການພັດທະນາຂະແໜງການຄ້າ ແລະ ພາກທຸລະກິດເອກະຊົນຂອງ ບົດ DTIS ປີ 2012 ໄດ້ລະບຸເຖິງ ການແກ້ໄຂບັນຫາ 109 ອັນທີ່ໄດ້ຈັດລວບລວມໄວ້ຢູ່ໃນທັງສາມເສົາຄໍ້າ ແລະ ໃນ 12 ຂົງເຂດໃຫຍ່ໆ.** ແຜນດໍາເນີນງານຍັງໄດ້ພັດທະນາຂອບການຕິດຕາມກວດກາແລະການປະເມີນຜົນທີ່ມີຕົວຊີ້ວັດສໍາລັບບັນດາເປົ້າໝາຍແລະຜົນ

ໄດ້ຮັບ. ເປົ້າໝາຍການພັດທະນາຄູ່ແຝດລວມມີການເຕີບໂຕທີ່ສະເໝີພາບ ແລະ ການຫຼຸດພົ້ນອອກຈາກສະຖານະພາບ LDC ໂດຍການຫລຸດຜ່ອນຄວາມທຸກຍາກ ແລະ ການມີເສດຖະກິດທີ່ມີຄວາມຫຼາກຫຼາຍທັນສະໄໝ. ແຜນກິດຈະກຳການເຄື່ອນໄຫວ ທີ່ໄດ້ຈັດລວມລວມໄວ້ເປັນ 3 ເສົາຄ້ຳຄື:

(i) ສະພາບແວດລ້ອມການຄ້າ ແລະການລົງທຶນທີ່ເອື້ອອຳນວຍໄດ້ຮັບການສ້າງຕັ້ງຂຶ້ນ

(ii) ຄວາມສາມາດໃນການແຂ່ງຂັນ, ຄຸນນະພາບ ແລະມູນຄ່າຂອງທຸລະກິດກະສິກຳ, ອຸດສາຫະກຳປຸງແຕ່ງ ແລະ ການບໍລິການໄດ້ຮັບການປັບປຸງ

(iii) ໄດ້ເຮັດໃຫ້ຂອບຂ່າຍການຄຸ້ມຄອງການຊ່ວຍເຫຼືອທາງການຄ້າ ເພື່ອເຊື່ອມສານການພັດທະນາການຄ້າ ແລະ ພາກທຸລະກິດເອກະຊົນເຂົ້າໃນກະແສຫລັກ ດີຂຶ້ນ.

52. **ໄດ້ມີການແກ້ໄຂບັນຫາ 109 ອັນໂດຍໄດ້ແບ່ງກິດຈະກຳຫລາຍອັນອອກເປັນ ໜ້າວຽກຕ່າງໆນາໆ.** ແຜນດຳເນີນງານໄດ້ກຳນົດໃຫ້ອົງການໃດໜຶ່ງຫຼືຫລາຍອົງການເພື່ອຮັບຜິດຊອບໃນການຈັດຕັ້ງປະຕິບັດໂດຍໄດລວບລວມເອົາໜ້າທີ່ໃນການແກ້ໄຂບັນຫາຈຳນວນຫລາຍສົມຄວນເຂົ້າໄວ້ຢູ່ໃນໂຄງການທີ່ສະເໜີ. ນອກຈາກສິ່ງທ້າທາຍດ້ານພາລາທິການໃນການບໍລິການຮັບໃຊ້ໃນການຈັດຕັ້ງປະຕິບັດການປະຕິຮູບດ້ານນະໂຍບາຍແລະລະບຽບການທີ່ເປັນກຸ່ມຂະໜາດໃຫຍ່ ແລະຫຼາກຫຼາຍແບບນີ້, ລັດຖະບານແມ່ນເຄື່ອນໄຫວບໍ່ໄດ້ເຕັມສ່ວນຍ້ອນການຖືກກະທົບຈາກໄພທຳມະຊາດຢ່າງຕິດຕໍ່ກັນ, ການຮັດກຸມທາງດ້ານງົບປະມານ ແລະ ການເຕີບໂຕຊ້າ ຂອງສິນເຊື່ອ. ນອກຈາກນັ້ນ, ກໍບໍ່ໄດ້ຈັດລຳດັບບຸລິມະສິດຂອງການແກ້ໄຂບັນຫາ ແລະ ຍັງບໍ່ໄດ້ຄຳນຶງເຖິງປານໃດກ່ຽວກັບລັກສະນະ ຂອງ ກິດຈະກຳຫຼາຍໆຢ່າງ ທີ່ຍັງຄຸມເຄືອກັບບັນຫາອັນເກົ່າທີ່ໄດ້ເຮັດຜ່ານມາ.

53. **ສປປ ລາວ ໄດ້ຈັດຕັ້ງປະຕິບັດບາງສ່ວນໃນຫລາຍໆຂໍ້ສະເໜີແນະ ຈາກບົດ DTIS ປີ 2012; ຢ່າງໃດກໍຕາມ, ຄວາມຄືບໜ້າແມ່ນຍັງຊ້າແລະຫຼາຍຂໍ້ຈຳກັດທີ່ໄດ້ລະບຸໄວ້ກ່ອນໜ້ານີ້ກໍຍັງຄົງມີຢູ່.** ບົດ DTIS ກ່ອນໜ້ານີ້ໄດ້ຮັບຮອງເອົາວິທີການຂອງທີ່ວລະບົບເສດຖະກິດໃນຂະນະດຽວກໍ່ຍັງໄດ້ພິນິດພິຈາລະນາ ໃນລາຍລະອຽດເພີ່ມເຕີມໃນບັນດາຂະແໜງຍ່ອຍທີ່ໄດ້ເລືອກ (DTIS, 2012). ການສຶກສາເປັນຂະແໜງການລວມມີ ທຸລະກິດກະສິກຳ, ການທ່ອງທ່ຽວ, ອຸດສາຫະກຳປຸງແຕ່ງທີ່ເນັ້ນການສົ່ງອອກ, ການສົ່ງເສີມການສົ່ງອອກທີ່ບໍ່ແມ່ນຊັບພະຍາກອນ ແລະ ການສົ່ງອອກຊັບພະຍາກອນທຳມະຊາດ. ບົດລາຍງານລະອຽດກ່ຽວກັບສະຖານະພາບ ຂອງການແກ້ໄຂແຕ່ລະບັນຫາໃນຈຳນວນທັງໝົດ 109 ອັນ ແລະ ການສະຫຼຸບສັງລວມບັນດາຕົວຊີ້ວັດ ການຕິດຕາມກວດກາແລະການປະເມີນຜົນແມ່ນໄດ້ລະບຸໄວ້ໃນເອກະສານຊ້ອນທ້າຍ A.

## ຕາຕະລາງ 2.1 ຂອບແຜນດຳເນີນງານການພັດທະນາຂະແໜງການຄ້າ ແລະ ພາກທຸລະກິດເອກະຊົນ ໃນບົດ DTIS (2012)

| | ເສົາຄ້ຳ/ຂົງເຂດການແກ້ໄຂບັນຫາ | ການປ່ຽນແປງຂອງລະດັບຜົນໄດ້ຮັບ | ກິດຈະກຳການດຳເນີນການ | ການປະກອບທຶນໃຫ້ໂຄງການ |
|---|---|---|---|---|
| 1 | **ສະພາບແວດລ້ອມການຄ້າ ແລະການລົງທຶນທີ່ເອື້ອອຳນວຍໄດ້ຮັບການສ້າງຕັ້ງຂຶ້ນ** | | | |
| 1.1 | ນະໂຍບາຍການຄ້າ: ການຈັດຕັ້ງປະຕິບັດ AEC ແລະ ຫລັງການເປັນສະມາຊິກ WTO | ພັນທະຜູກພັນດ້ານກົດໝາຍແລະດ້ານ ອື່ນໆ ຕໍ່ສັນຍາສາກົນ, ເຊັ່ນ WTO ແລະ ອາຊຽນ ໄດ້ຮັບການຈັດຕັ້ງປະຕິບັດ, ໂດຍມີລະບົບການສະໜັບສະໜູນທີ່ດີຂຶ້ນທີ່ໃຊ້ງານໄດ້, ລວມທັງການຕິດຕາມ, ການສື່ສານ, ແລະ ການສ້າງຂີດຄວາມສາມາດ. | 8 | 6 |
| 1.2 | ສະພາບແວດລ້ອມທາງທຸລະກິດ | ໄດ້ມີການເສີມສ້າງສະພາບແວດລ້ອມທາງທຸລະກິດໃຫ້ດີ ໂດຍໃຫ້ທຸກໆທຸລະກິດ ມີໂອກາດເທົ່າທຽມກັນ ແລະ ການປົກປ້ອງຜູ້ຊົມໃຊ້ກໍ່ໄດ້ຮັບການປັບປຸງ | 16 | 11 |
| 1.3 | ການອຳນວຍຄວາມສະດວກທາງດ້ານການຄ້າ | ລະບົບຂັ້ນຕອນ ແລະ ຂະບວນການການນຳເຂົ້າ, ສົ່ງອອກ ແລະ ການຂົນສົ່ງຜ່ານແດນທີ່ງ່າຍດາຍ, ໂປ່ງໃສ, ແລະ ລາຄາຖືກກວ່າໄດ້ຮັບການພັດທະນາ ແລະ ຈັດຕັ້ງປະຕິບັດດ້ວຍການມີສ່ວນຮ່ວມຂອງພາກເອກະຊົນ. | 9 | 7 |
| 1.4 | ພື້ນຖານໂຄງລ່າງດ້ານຄຸນນະພາບແຫ່ງຊາດ | ມີຂີດຄວາມສາມາດດ້ານພື້ນຖານໂຄງລ່າງຂອງລະບົບຄຸນນະພາບທີ່ໃຊ້ງານໄດ້ ສຳລັບການຍົກລະດັບການນຳໃຊ້ມາດຕະຖານ SPS ແລະ TBT ລວມທັງຂໍ້ກຳນົດທາງດ້ານກົດຫມາຍແລະອົງການຄຸ້ມຄອງດັດສົມ, ສົ່ງຜົນໃຫ້ຜະລິດຕະພັນມີການປັບປຸງຄຸນນະພາບທີ່ສອດຄ່ອງກັບມາດຕະຖານສາກົນ. | 10 | 9 |
| 2 | **ຄວາມສາມາດແກ້ງແຍ້ງແຂ່ງຂັນ** | | | |
| 2.1 | ຄວາມສາມາດແກ້ງແຍ້ງແຂ່ງຂັນໃນລະດັບວິສາຫະກິດ | ມາດຕະການສະຫນັບສະຫນູນຄຸນນະພາບແລະຜະລິດຕະພາບໃນຂັ້ນວິສາຫະກິດປະເພດ SME ທີ່ນຳໄປສູ່ການຍົກສູງຄວາມສາມາດແຂ່ງຂັນຂອງຂະແຫນງການທຸລະກິດ ແລະໂດຍສະເພາະ SME ໃນຕະຫຼາດພາຍໃນແລະສາກົນ ໄດ້ຮັບການຍົກສູງຂຶ້ນ. | 1 | 1 |
| 2.2 | ການແກ້ໄຂບັນຫາເປັນຂະແໜງ ການສະເພາະ* | ການສະຫນັບສະຫນູນຂະແຫນງການແລະ PPD ໄດ້ຮັບການເສີມຂະຫຍາຍ ເຊິ່ງຈະເຮັດໃຫ້ການຈ້າງງານແລະລາຍໄດ້ຂອງຄົນທຸກຍາກເພີ່ມຂຶ້ນໃນຂະແຫນງການກະສິກຳ, ອຸດສາຫະກຳປຸງແຕ່ງແລະການບໍລິການທີ່ສຳຄັນ | 24 | 14 |

| | ເສົາຄ້ຳ/ຂົງເຂດການແກ້ໄຂບັນຫາ | ການປ່ຽນແປງຂອງລະດັບຜົນໄດ້ຮັບ | ກິດຈະກຳການດຳເນີນການ | ການປະກອບທຶນໃຫ້ໂຄງການ |
|---|---|---|---|---|
| 3 | **ຂອບການຈັດຕັ້ງປະຕິບັດ ແລະ ຄຸ້ມຄອງການຊ່ວຍເຫລືອເພື່ອພັດທະນາການຄ້າ** | | | |
| 3.1 | ການຄ້າທີ່ຍືນຍົງ | ການເຕີບໂຕດ້ານການຄ້າໄດ້ສ້າງຜົນປະໂຫຍດໃຫ້ແກ່ຄົນທຸກຍາກໂດຍຜ່ານການເຊື່ອມໂຍງເຂົ້າກັບຂະບວນການຜະລິດທີ່ດີກວ່າໂດຍທີ່ຂໍ້ພິຈາລະນາບັນຫາດ້ານບົດບາດຍິງ-ຊາຍ, ຄວາມທຸກຍາກ ແລະ ສິ່ງແວດລ້ອມໄດ້ຖືກບັນຈຸເຂົ້າ ແລະ ແກ້ໄຂຢູ່ໃນຂະ ແໜງການຢ່າງເປັນລະບົບ. | 5 | 3 |
| 3.2 | ການພັດທະນາຂີດຄວາມສາມາດ | ສາມາດສ້າງໄດ້ຂີດຄວາມສາມາດດ້ານການຈັດຕັ້ງ ແລະ ການຄຸ້ມຄອງທີ່ພຽງພໍ ເພື່ອສ້າງ ແລະ ຈັດຕັ້ງປະຕິບັດຍຸດທະສາດທີ່ກ່ຽວຂ້ອງກັບການຄ້າ ແລະແຜນການຈັດຕັ້ງປະຕິບັດ. | 6 | 6 |
| 3.3 | ການເຊື່ອມສານການຄ້າເຂົ້າໃນກະແສຫລັກ | ການຄ້າໄດ້ຮັບການເຊື່ອມສານເຂົ້າໃນກະແສຫລັກໂດຍຜ່ານການປັບປຸງການວາງແຜນລະດັບຊາດທີ່ກ່ຽວຂ້ອງກັບການຄ້າ ແລະ ການປຶກສາຫາລື ແລະ ໂຄງປະກອບການຈັດຕັ້ງປະຕິບັດ ທີ່ມີການປະສານງານກັນ | 4 | 6 |
| 3.4 | ຂອບການຄຸ້ມຄອງການຊ່ວຍເຫລືອເພື່ອພັດທະນາການຄ້າ | ຂອບການຄຸ້ມຄອງເພື່ອພັດທະນາການຄ້າທີ່ເຄື່ອນໄຫວໄດ້ງຮັບການຈັດສັນທຶນຮອນໃຫ້ຢ່າງພຽງພໍ ແລະ ໄດ້ນຳໃຊ້ວິທີການເບິ່ງບັນ ຫາຫລາຍແງ່ຕາມແບບຂອງແຜນງານໂດຍອີງໃສ່ຫຼັກການຂອງຖະແຫຼງການນະຄອນຫຼວງວຽງຈັນ ແລະ ວິໄສທັດຮ່ວມຂອງບັນດາພາກສ່ວນກ່ຽວຂ້ອງທີ່ມີສ່ວນໄດ້ສ່ວນເສຍທັງພາກລັດ ແລະ ເອກະຊົນ. | 5 | 2 |
| 3.5 | ການຕິດຕາມແລະການປະເມີນຜົນ | ລະບົບການຕິດຕາມແລະການປະເມີນຜົນທີ່ໃຊ້ໄດ້ຈິງເພື່ອຮັບໃຊ້ຄວາມຕ້ອງການຂໍ້ມູນຂ່າວສານ ຂອງລະດັບໂຄງການແລະແຜນງານ ແລະມີການເສີມຂະຫຍາຍການຄຸ້ມຄອງແບບອີງໃສ່ຜົນໄດ້ຮັບ. | 15 | 5 |

*ໝາຍເຫດ: * ຂະແໜງການທີ່ມີຈຳນວນກິດຈະກຳການດຳເນີນການລະບຸໃນວົງເລັບ: ທຸລະກິດກະສິກຳ (6), ການທ່ອງທ່ຽວ (4), ຫັດຖະກຳຕໍ່າແຜນ (4), ຂະແໜງຕັດຫຍິບ (4), ປຸງແຕ່ງໄມ້ (6)*

## 2.4 ບັນດາບົດຮຽນຈາກບົດ DTIS 2012

54. **ບັນຊີລາຍການບຸລິມະສິດອັນຍືດຍາວ ແມ່ນ ບໍ່ໄດ້ແກ້ໄຂທັງບັນຫາສິ່ງທ້າທາຍໃນການປະສານງານ ແລະ ທັງຄວາມສຳຄັນການຈັດລຳດັບກ່ອນຫລັງຂອງການແກ້ໄຂບັນຫາທີ່ແນໃສ່ບັນດາຂໍ້ຈຳກັດຂອງພຶດລະບົບເສດຖະກິດ ແລະ ອັນສະເພາະຂອງຂະແໜງການ.** ບົດ DTIS ໄດ້ກຳນົດຂໍ້ຈຳກັດຫຼາຍຢ່າງ, ລວມທັງພື້ນຖານໂຄງລ່າງ (ການມີໄຟຟ້າໃຊ້), ການຂາດຄວາມສາມາດໃນການໄດ້ຮັບບໍລິການທາງດ້ານການເງິນ, ອັດຕາອາກອນທີ່ສູງ, ຄວາມບໍ່ແນນອນດ້ານລະບຽບການ, ການຂາດແຄນທັກສະໃນການຄຸ້ມຄອງ ແລະການຄຸ້ມຄອງລັດທີ່ຍັງບໍ່ເຂັ້ມແຂງ. ບັນດາຄູ່ຮ່ວມມືສາກົນໄດ້ເຫັນດີນຳກັນໃນການສະໜັບສະ ໜູນການເຄື່ອນໄຫວໂຄງການໃນສາມເສົາຄ້ຳໃນແຜນງານດັ່ງກາວ, ຄື: ປັບປຸງສະພາບແວດລ້ອມແຫ່ງການດຳເນີນທຸລະກິດ ແລະ ການລົງທຶນ, ຊຸກຍູ້ສົ່ງເສີມການແຂ່ງຂັນລະດັບວິສາຫະກິດ ແລະ ສະໜັບສະໜູນການສ້າງຂີດຄວາມສາມາດທັງດ້ານບໍລິຫານລັດ ແລະ ພາກເອກະຊົນ.

55. ບົດ DTIS ໄດ້ຖືເປັນບຸລິມະສິດການເພີ່ມທະວີການປຶກສາສົນທະນາແລກປ່ຽນລະຫວ່າງພາກລັດ ແລະ ເອກະຊົນ ລວມທັງການມີສ່ວນຮ່ວມຂອງສັງຄົມພົນລະເຮືອນກ່ຽວກັບຄວາມສໍາຄັນຂອງການເຊື່ອມສານການຄ້າເຂົ້າໃນກະແສຫລັກຂອງການພັດທະນາ, ການຫຼຸດຜ່ອນຕົ້ນທຶນໃຫ້ການຄ້າ, ການເພີ່ມທະວີການຄ້າໃນພາກພື້ນ ແລະ ທົ່ວໂລກ. ການກັບມາເຄື່ອນໄຫວຄືນໃຫມ່ຂອງໜ່ວຍງານຂະແຫນງການຄ້າແລະພາກເອກະຊົນ, ທີ່ໄດ້ສະຫລຸບຄວາມໄວ້ໃນບົດ DTIS ຄັ້ງກ່ອນນີ້, ແມ່ນເປັນເວທີທີ່ມີຄຸນຄ່າເພື່ອຊຸກຍູ້ໃຫ້ວາລະການປະຕິຮູບມີຄວາມຄືບໜ້າ,. ຂະບວນການ DTIS, ໂດຍເນັ້ນໃສ່ການປັບປຸງການປະສານງານ ແລະ ຊຸກຍູ້ການສົນທະນາແລກປ່ຽນ, ຍັງໄດ້ສ້າງຕັ້ງຄະນະກໍາມາທິການອໍານວຍຄວາມສະດວກດ້ານການຄ້າແຫ່ງຊາດ (NTFC), ຂະບວນການ EIF ເປັນເຄື່ອງມືໃນການໃຊ້ປະໂຫຍດຈາກເງິນທຶນເພື່ອສະໜັບສະໜູນ TPSWG ແລະ NTFC. ການມີສ່ວນຮ່ວມຂອງຜູ້ໃຫ້ທຶນຫຼາຍຝ່າຍໃນ TPSWG ເຮັດໃຫ້ມີການແລກປ່ຽນຂໍ້ມູນຢ່າງໂປ່ງໃສ ແລະມີການຄົ້ນຄວ້ານໍາໃຊ້. ນີ້ອັນເປັນການປັບປຸງການປະສານງານຂອງຜູ້ໃຫ້ທຶນ, ເຮັດໃຫ້ການວາງແຜນງານໂຄງການມີປະສິດທິພາບຫຼາຍຂຶ້ນ ແລະ ເປັນການເພີ່ມມີປະສິດທິຜົນ. ກອງປະຊຸມທຸລະກິດລາວ ໄດ້ຈັດໃຫ້ມີການປຶກສາຫາລືແລກປ່ຽນພາກລັດ-ເອກະຊົນ ລະດັບສູງປະ ຈໍາປີ ເພື່ອທົບທວນຄວາມຄືບໜ້າໃນການປັບປຸງສະພາບແວດລ້ອມ ທີ່ເອື້ອອໍານວຍແກ່ການດໍາເນີນທຸລະກິດ. ມີຜູ້ເຂົ້າຮ່ວມຫຼາຍກວ່າ 400 ຄົນທີ່ມາຈາກພາກລັດ, ພາກເອກະຊົນ ແລະ ຄູ່ຮ່ວມມືສາກົນໄດ້ເຂົ້າຮ່ວມກອງປະຊຸມໃນປີ 2021. ໃນການເປີດເວທີກອງປະຊຸມ, ທ່ານນາຍົກລັດຖະມົນຕີ, ພະນະທ່ານ ພັນຄໍາ ວິພາວັນ ໄດ້ຍົກໃຫ້ເຫັນເຖິງຄວາມມຸ່ງໝັ້ນຂອງລັດຖະບານ ໃນການສົ່ງເສີມການລົງທຶນຂອງເອກະຊົນໃນອຸດສາຫະກໍາປຸງແຕ່ງທົ່ວໄປ, ການທ່ອງທ່ຽວ ແລະ ອຸດສາຫະກໍາປຸງແຕ່ງກະສິກໍາ ແລະ ຮັບປະກັນຕໍ່ນັກລົງທຶນກ່ຽວກັບຄວາມຕັດສິນໃຈຂອງຈາກພາກລັດ ເພື່ອແກ້ໄຂຂໍ້ຈໍາກັດໃນການດໍາເນີນທຸລະກິດ.

56. ຫຼາຍກິດຈະກໍາທີ່ລະບຸໄວ້ໃນບົດ DTIS ປີ 2012 ແມ່ນມີຄວາມຊັບຊ້ອນ ແລະ ຕ້ອງການທັກສະ ແລະ ປະສົບການທາງດ້ານເຕັກນິກສູງ ເພື່ອຈັດຕັ້ງປະຕິບັດໃຫ້ປະສົບຜົນສໍາເລັດ. ການຈັດຕັ້ງປະຕິບັດຂອບການບໍລິຫານຄວາມສ່ຽງແບບປະສົມປະສານ (IRMF) ແມ່ນຂະບວນການທີ່ດໍາເນີນໄປຫຼາຍປີແລະຮຽກຮ້ອງໃຫ້ມີວັດທະນະທໍາຂອງການຮ່ວມມືລະຫວ່າງອົງການ.

57. ຄວາມສໍາຄັນໃນການຮັບຮູ້ກ່ຽວກັບສິ່ງທ້າທາຍດ້ານວິຊາການ ທີ່ຜູ້ເຂົ້າຮ່ວມຕົ້ນຕໍຂອງພາກເອກະຊົນພວມຜະເຊີນຢູ່. LNCCI ມີຄວາມຈໍາກັດໃນການຮ່ວມມືໃນການອໍານວຍຄວາມສະດວກດ້ານການຄ້າ ຍ້ອນຄວາມສາມາດຈໍາກັດຂອງບັນດາໜ່ວຍງານປຶກສາຫາລືທຸລະກິດຕາມຂະແໜງການຂອງຕົນ, ບັນດາຈຸດອ່ອນຂອງການປະສານງານລະຫວ່າງກະຊວງ ແລະ ການຂາດຄວາມມຸ່ງໝັ້ນຂອງບັນດາກະຊວງສາຍຕັ້ງຕ່າງໆ ໃນການແກ້ໄຂບັນຫາຂອງພາກເອກະຊົນ. ການປັບປຸງຂີດຄວາມສາມາດຂອງພາກເອກະຊົນໃນການອອກຄໍາເຫັນທີ່ມີເຫດຜົນດ້ານທາງວິຊາການທີ່ເຂັ້ມແຂງເພື່ອປະກອບສ່ວນປະຕິຮູບນະໂຍບາຍແລະລະບຽບການທີ່ພາກສ່ວນຕົນມີຄວາມເປັນຫ່ວງກັງວົນ, ຈະເຮັດໃຫ້ການປຶກສາຫາລືແລກປ່ຽນລະຫວ່າງພາກລັດ - ເອກະຊົນຄວາມເຂັ້ມແຂງດ້ານຄຸນນະພາບແລະເພີ່ມຄວາມເປັນໄປໄດ້ຂອງການຈັດຕັ້ງປະຕິບັດທີ່ທັນເວລາ.

58. ການປະສານງານທີ່ມີຈໍາກັດ ລະຫວ່າງ ອົງການ ແລະ ການບໍ່ມີລະບົບການຕິດຕາມ. ຜົນກະທົບທາງລົບດ້ານເສດຖະກິດຂອງ COVID-19 ໄດ້ເສີມສ້າງມານະຈິດທາງດ້ານການເມືອງໃນລະດັບສູງໃນການປັບປຸງສະພາບແວດລ້ອມແຫ່ງການດໍາເນີນທຸລະກິດ; ແນວໃດກໍ່ຕາມ, ການຈັດຕັ້ງປະຕິບັດການປະຕິຮູບຍັງຄົງມີຄວາມຫຍຸ້ງຍາກເນື່ອງຈາກການປະສານງານທີ່ມີຈໍາກັດລະຫວ່າງອົງການ ແລະ ການບໍ່ມີລະບົບການຕິດຕາມ. ໄດ້ສະເໜີແນະໃຫ້ບັນດາອົງການຫລັກຄື (MOIC) ສ້າງແຜນດໍາເນີນງານທີ່ຈະແຈ້ງໂດຍ ລະບຸບັນດາກິດຈະກໍາການເຄື່ອນໄຫວຕາມກໍານົດເວລາ, ຮັບປະກັນການຕິດຕາມກວດກາທີ່ເປັນກິດຈະວັດ ແລະ ມີການລາຍງານຄວາມຄືບໜ້າຕໍ່ທຸກໆພາກສ່ວນທີ່ມີສ່ວນໄດ້ສ່ວນເສຍທີ່ກ່ຽວຂ້ອງ. ການເພີ່ມທະວີການສື່ສານ ແລະ ການເຜີຍແຜ່ຂໍ້ມູນຂ່າວສານໃຫ້ທົ່ວເຖິງຈະ: (i) ເສີມຂະຫຍາຍຄວາມສາມາດຂອງພາກເອກະຊົນໃນການສະໜັບສະໜູນການປະຕິຮູບຢ່າງມີປະສິດທິຜົນກວ່າເກົ່າ; ແລະ (ii) ເພີ່ມນະໂຍ ບາຍສົ່ງເສີມການປັບປຸງການໃຫ້ບໍລິການສາທາລະນະ.

59. ບົດ DTIS ຂອງສປປ ລາວສະບັບປັບໃໝ່ ຄົ້ນຫາການກໍານົດບູລິມະສິດທີ່ກ່ຽວຂ້ອງກັບການຄ້າທີ່ມີທ່າແຮງໃນການຫຼຸດຜ່ອນຄວາມທຸກຍາກຢ່າງສູງສຸດ, ສົ່ງເສີມການເຕີບໂຕແບບຍືນຍົງ ແລະ ສ້າງຄວາມສາມາດຟື້ນຕົວຄືນສູ່ສະພາບເດີມເພື່ອເຕີບໂຕອີກຄັ້ງ ຫລັງ COVID-19, ໂດຍຜ່ານການຫຼຸດຜ່ອນຕົ້ນທຶນທາງການຄ້າ ແລະ ວິທີການປະຕິບັດໃນການຄຸ້ມຄອງດັດສົມທີ່ດີຂຶ້ນ. ນັບຕັ້ງແຕ່ DTIS ຄັ້ງຜ່ານມາ (2012) ໄດ້ມີການພັດທະນາທີ່ສໍາຄັນໃນລະດັບຊາດ, ພາກພື້ນ ແລະ ໃນລະດັບໂລກ, ລວມທັງການແຜ່ລະບາດຂອງພະຍາດ COVID-19 ໃນປັດຈຸບັນ. ການປັບປຸງບົດໃຫ້ເປັນປັດຈຸບັນໄດ້ເປີດໂອກາດໃຫ້ລັດຖະບານເພື່ອຈັດວາງນະໂຍບາຍ ແລະ ຍຸດທະສາດການຄ້າຂອງຕົນໃຫ້ດີຂຶ້ນສອດຄ່ອງກັບຄໍາໝັ້ນສັນຍາຂອງຕົນຕໍ່ກັບຄວາມຫຼາກຫຼາຍທາງດ້ານເສດຖະກິດ ແລະ ການຫຼຸດຜ່ອນຄວາມທຸກຍາກ ເນື່ອງຈາກມັນເປັນການສ້າງສາຄືນໃຫມ່ຫຼັງ COVID-19 ແລະ ກ້າວໄປສູ່ການຫລຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ (LDC) ໃນປີ 2026.


Ministry of Industry and Commerce
Department of Planning and Cooperation
NIU Division
Project on
Promotion of Export

# ບົດທີ 3 ຜົນງານການເຄື່ອນໄຫວຂອງການຄ້າ

## 3.1 ພາບລວມຂອງຜົນງານການເຄື່ອນໄຫວຂອງການຄ້າໃນໄລຍະຫລັງໆມານີ້

60. ບົດນີ້ບັນທຶກການປ່ຽນແປງທັງໂຄງປະກອບຂອງສິນຄ້າ ແລະ ທິດທາງພູມສາດຂອງການນຳເຂົ້າ ແລະ ສົ່ງອອກ. ພາກນີ້ສະເໜີພາບລວມຂອງການວັດປະສິດທິພາບທາງດ້ານການຄ້າໃນໄລຍະມໍ່ໆມານີ້ຂອງ ສປປ ລາວ ໂດຍເລີ່ມຈາກ ການສະຫຼຸບລະດັບການເປີດຕົວການຄ້າຂອງຕົນກັບຕ່າງປະເທດເມື່ອສົມທຽບກັບປະເທດຄູ່ຄ້າໃນພາກພື້ນ. ມັນກ້າວໄປ ສູ່ການພິຈາລະນາຫາເຫດຜົນກ່ຽວກັບທິດທາງພູມສາດທີ່ມີການວິວັດໄປຂອງການນຳເຂົ້າແລະການສົ່ງອອກແລະການ ປ່ຽນແປງໂຄງປະກອບຂອງສິນຄ້າຂອງການຄ້ານັບຕັ້ງແຕ່ 2012. ການທົບທວນການວັດປະສິດທິພາບຂອງການຄ້າໃນ ທົດສະວັດທີ່ຜ່ານມາ ແມ່ນອີງໃສ່ໂຄງປະກອບຂອງສິນຄ້າ ຂອງການຄ້າ ແລະລະບົບເອກະພາບ (HS) ໃນລະດັບ 6 ຕົວ ເລກ ຈາກຖານຂໍ້ມູນ Comtrade ຂອງ ສະຫະປະຊາຊາດ. ພາບລວມຂອງການວັດປະສິດທິພາບທາງດ້ານການຄ້າຂອງ ສປປ ລາວ ແມ່ນອີງໃສ່ຂໍ້ມູນການຄ້າ ຄອມທະເຣດ ຂອງອົງການສະຫະປະຊາຊາດ (UN).

61. **ລະດັບການເປີດກວ້າງການຄ້າກັບຕ່າງປະເທດໃນ ສປປ ລາວ ແມ່ນຕໍ່າກວ່າລະດັບທີ່ຄາດຫວັງເລັກນ້ອຍ ສຳລັບ ປະເທດທີ່ມີລາຍໄດ້ຕໍ່າຫົວຄົນໃນລະດັບນີ້.** ສປປ ລາວ ເປັນປະເທດທີ່ມີເສດຖະກິດເປີດກວ້າງໜ້ອຍກວ່າປະເທດເພື່ອນ ບ້ານອາຊຽນຂອງຕົນ, ໄທ, ກຳປູເຈຍ ແລະ ຫວຽດນາມ. ການເປີດກວ້າງການຄ້າຂອງ ສປປ ລາວ ໄດ້ຫຼຸດລົງເລັກນ້ອຍ ໃນໄລຍະປີ 2013-2018, ຈາກສະເລ່ຍ 0,91 ໃນໄລຍະນັ້ນມາເປັນ 0,75 ໃນປີ 2016. ໃນປີ 2013, ສປປ ລາວ ແມ່ນ ຢູ່ເໜືອເສັ້ນທາອຽງທີ່ຊີ້ໃຫ້ເຫັນວ່າການເປີດກວ້າງການຄ້າແມ່ນຢູ່ເໜືອລະດັບ ເຊິ່ງຊີ່ສະແດງອອກໃນລາຍໄດ້ຕໍ່າຫົວຄົນ ຂອງຕົນ (ຮູບ 3.1 ແລະ 3.2) ແລະຮອດປີ 2018 ປະເທດລາວໄດ້ຫຼຸດລົງຕໍ່າກວ່າເສັ້ນດັ່ງກ່າວ.

### ຮູບ 3.1 ການເປີດຕົວຂອງການຄ້າໂດຍສະເລ່ຍ, 2013




*ໝາຍເຫດ: ເບິ່ງໝາຍເຫດ ສຳລັບຮູບ 3.2.*

*ແຫລ່ງທີ່ມາ: ໄດ້ຈາກຕົວຊີ້ວັດການພັດທະນາຂອງໂລກ (WDI)*

## ຮູບ 3.2 ການເປີດຕົວສະເລ່ຍຂອງການຄ້າ, 2018




*ໝາຍເຫດ: ການເປີດຕົວຕໍ່ພາຍນອກຂອງການຄ້າລວມ(ການສົ່ງອອກສິນຄ້າ ແລະ ບໍລິການບວກກັບການນຳເຂົ້າຄິດເປັນສ່ວນແບ່ງ ຂອງ GDP ໂດຍເອົາມາແຕ້ມໃສ່ກັບໂລກະລິດທຳມະຊາດຂອງລາຍໄດ້ຕໍ່ຫົວຄົນເປັນໂດລາສະຫະລັດ. ການທີ່ປະເທດມີຈຸດຕັ້ງຢູ່ລຸ່ມເສັ້ນພໍດີເປັນຕົວບົ່ງບອກວ່າການເປີດຕົວຂອງການຄ້າຂອງປະເທດແມ່ນຕ່ຳກວ່າລະດັບສະເລ່ຍຕາມທີ່ເຫັນຈາກລາຍໄດ້ສະເລ່ຍຕໍ່ຫົວຄົນ. ແຫລ່ງມີມາ: WDI.*

*ຄຳແປເພີ່ມ ຮູບ 3.1: ແກນນອນແມ່ນຄ່າໂລກາລິດສະເລ່ຍ ຂອງ GDP ຕໍ່ຫົວຄົນ, 2013; ແກນຕັ້ງແມ່ນການເປີດຕົວສະເລ່ຍຂອງການຄ້າໃນ GDP, 2013 (ສຳລັບຮູບ 3.2. ແມ່ນ ປີ 2018); ຢູ່ລຸ່ມເສັ້ນ ມີ ເນປານ ແລະ ມຽນມາຈາກເສັ້ນອອກໄປ; ຢູ່ເທິງເສັ້ນ ມີ ສປປ ລາວ, ກຳປູເຈຍເປັນເມັດສີເທົາ ແລະ ໄທເປັນເມັດສີເຫລືອງ ແລະ ຫວຽດນາມເມັດສີຟ້າຢູ່ເທິງ.*

## ຮູບ 3.3 ການເປີດຕົວ ຂອງການຄ້າບໍລິການ 2018




*ແຫລ່ງທີ່ມາ: ໄດ້ຈາກຕົວຊີ້ວັດການພັດທະນາຂອງໂລກ (WDI)*

*ໝາຍເຫດ: ແກນນອນ ແມ່ນຄ່າສະເລ່ຍໂລກາລິດ GDP ຕໍ່ຫົວຄົນ, 2018; ແກນຕັ້ງ ແມ່ນ ການເປີດຕົວ: ການຄ້າບໍລິການສະເລ່ຍ/GDP*

62. **ການເປີດກວ້າງຕໍ່ພາຍນອກຂອງ ສປປ ລາວ ຍັງຄົງຕໍ່າກວ່າລະດັບທ່າແຮງ ເຊິ່ງບົ່ງບອກໂດຍລາຍໄດ້ຕໍ່ຫົວຄົນຂອງທັງການຄ້າສິນຄ້າ ແລະ ການຄ້າບໍລິການ.** ສປປ ລາວ ຕັ້ງຢູ່ຈຸດລຸ່ມເສັ້ນພໍດີ ສໍາລັບທັງການຄ້າສິນຄ້າ ແລະ ການຄ້າບໍລິການ, ເຊິ່ງຊີ້ໃຫ້ເຫັນເຖິງທ່າແຮງສໍາລັບການເພີ່ມທະວີການຄ້າ (ຮູບ 3.3 ແລະ 3.4).

## ຮູບ 3.4 ການເປີດຕົວ ຂອງການຄ້າສິນຄ້າ: 2018




*ແຫລ່ງທີ່ມາ: ໄດ້ຈາກຕົວຊີ້ວັດການພັດທະນາຂອງໂລກ (WDI), ໝາຍເຫດ: ແກນນອນແມ່ນ ຄ່າສະເລ່ຍໂລກາລິດ GDP ຕໍ່ຫົວຄົນ, 2018; ແກນຕັ້ງ ແມ່ນການເປີດຕົວ -ສະເລຍຂອງການຄ້າສິນຄ້າຕໍ່ GDP; ໃນຮູບນີ້ ສປປ ລາວ ແລະ ຫວຽດນາມຢູ່ກ້ອງເສັ້ນທາງຈາກແກນຕັ້ງອອກໄປ*

63. **ນັບຕັ້ງແຕ່ປີ 2013 ເປັນຕົ້ນມາ, ການສົ່ງອອກສິນຄ້າຂອງ ສປປ ລາວ ໄດ້ເພີ່ມຂຶ້ນໄປສູ່ ສປ ຈີນ, ຫວຽດນາມ, ແລະ ໄທ, ແລະ ຫລຸດຈາກໄປທາງ EU-28 ແລະ ອິດສະຕຣາລີ.** ໃນໄລຍະດຽວກັນ, ການນໍາເຂົ້າໄດ້ສືບຕໍ່ເອົາມາຈາກແຫຼ່ງຕົ້ນຕໍ ຄືຈາກໄທ, ຫວຽດນາມ ແລະ ຈີນ ໂດຍມີການປ່ຽນແປງທີ່ຂ້ອນຂ້າງຈໍາກັດຂອງສ່ວນແບ່ງ. ການຫັນທິດສົ່ງອອກຄົ້ນໃໝ່ໃນແງ່ພູມສາດໃນໄລຍະນີ້ສ່ວນໃຫຍ່ແມ່ນມາຈາກການຂາຍບໍລິສັດບໍ່ແຮ່ໃຫຍ່ທີ່ສຸດໃຫ້ນັກລົງທຶນຈີນ.

64. **ສປປ ລາວ ຂາດດຸນການຄ້າທັງບັນຊີສິນຄ້າ ແລະ ການບໍລິການ.** ໃນດ້ານສິນຄ້າ ແລະ ການບໍລິການລວມແລ້ວ ສປປ ລາວ ຂາດດຸນການຄ້າເປັນຈໍານວນຫຼວງຫຼາຍໃນລະຫວ່າງການກໍ່ສ້າງເຂື່ອນໄຟຟ້າ ເຊິ່ງເພີ່ມຂຶ້ນຫຼາຍກວ່າ 20 ສ່ວນຮ້ອຍຂອງ GDP ໃນປີ 2012 ແລະ 2013 ກ່ອນທີ່ຈະຫຼຸດລົງມາເປັນ 8,7 ສ່ວນຮ້ອຍໃນປີ 2016. ເບິ່ງຮູບ 3.5 ເຊິ່ງສະແດງໃຫ້ເຫັນວ່າ ສປປ ລາວ ໄດ້ຍ້າຍຈາກສ່ວນເກີນຂອງດຸນການບໍລິການ, ໃນປີ 2009 ຫາ 2011, ເປັນການຂາດດຸນຢ່າງຕໍ່ເນື່ອງນັບຕັ້ງແຕ່ປີ 2012.

65. **ການຄ້າການບໍລິການໃນ ສປປ ລາວ ແມ່ນກະຈຸກຕົວຢູ່ໃນການຂົນສົ່ງ ແລະ ການເດີນທາງ ຫຼາຍກວ່າການບໍລິການທີ່ທັນສະໄໝທີ່ເປັນການຊຸກຍູ້ການແຂ່ງຂັນ.** ການຂົນສົ່ງ ແລະການຈໍລະຈອນແຈກຢາຍກວມເອົາເກືອບ 90 ສ່ວນຮ້ອຍຂອງ ສິນເຂົ້າຂອງອຸດສາຫະກໍາປຸງແຕ່ງ ທີ່ເປັນການບໍລິການ. ການບໍລິການທີ່ທັນສະໄໝ, ລວມທັງການເງິນ, ການປະກັນໄພແລະ ເຕັກໂນໂລຊີຂໍ້ມູນຂ່າວສານ ແລະ ການສື່ສານ ICT, ເປັນຕົວຂັບເຄື່ອນທີ່ສໍາຄັນຂອງການແຂ່ງຂັນກັບສາກົນ. ຢູ່ ສປປ ລາວ, ຂະແໜງການເຫຼົ່ານີ້ມີຂະໜາດນ້ອຍກວ່າ ທຽບໃສ່ບັນດາເສດຖະກິດໃກ້ຄຽງ. ມູນຄ່າການສົ່ງອອກການບໍລິການຕໍ່ຫົວຄົນ ຂອງສປປ ລາວເພີ່ມຂຶ້ນ 60 ສ່ວນຮ້ອຍນັບຕັ້ງແຕ່ປີ 2010, ໃນຂະນະທີ່ການສົ່ງອອກສິນຄ້າຕໍ່ຫົວຄົນເພີ່ມຂຶ້ນ 3 ເທົ່າໃນມູນຄ່າສ່ວນໃຫຍ່ແມ່ນສະທ້ອນໃຫ້ເຫັນເຖິງການເພີ່ມການຂຸດຄົ້ນບໍ່ແຮ່ ແລະ ການສົ່ງອອກພະລັງງານ. ຮູບທີ 3.6 ສະແດງໃຫ້ເຫັນທັງການສົ່ງອອກບໍລິການຕໍ່ຫົວຄົນ ແລະ ການສົ່ງອອກ ຂອງຂະ ແໜງສິນຄ້າ. ໃນໄລຍະປີ 2010-2018, ການສົ່ງອອກການບໍລິການຕໍ່ຫົວຄົນໄດ້ເພີ່ມຂຶ້ນເປັນສອງເທົ່າສໍາລັບປະເທດບ້ານໃກ້ເຮືອນຄຽງ ຄື ໄທ, ກໍາປູເຈຍ ແລະ ຫວຽດນາມ.

## ຮູບ 3.5 ດຸນການຄ້າສິນຄ້າ ແລະ ບໍລິການ ແລະ ດຸນການຄ້າລວມ ຂອງ ສປປ ລາວ, 2009-2017




*ແຫລ່ງທີ່ມາ: ໄດ້ຈາກຕົວຊີ້ວັດການພັດທະນາຂອງໂລກ; ໝາຍເຫດ: ສີຟ້າ ແມ່ນ ດຸນການຄ້າ ເປັນສ່ວນຮ້ອຍຂອງ GDP, ສີແດງ ແມ່ນດຸນການຄ້າສິນຄ້າ ເປັນສ່ວນຮ້ອຍ ຂອງ GDP , ສີເທົາ ແມ່ນ ດຸນບໍລິການ ເປັນສ່ວນຮ້ອຍ ຂອງ GDP*

## ຮູບ 3.6 ການສົ່ງອອກສິນຄ້າ ແລະ ການບໍລິການ ຕໍ່ຫົວຄົນ ຂອງ ສປປ ລາວ ໃນລາຄາປັດຈຸບັນ




*ແຫລ່ງທີ່ມາ: ໄດ້ຈາກຕົວຊີ້ວັດການພັດທະນາຂອງໂລກ; ໝາຍເຫດ: ແກນຕັ້ງ ແມ່ນ ມູນຄ່າເປັນໂດລາ ໃນລາຄາປັດຈຸບັນ*

66. **ອັດຕາການເຕີບໂຕສະເລ່ຍຕໍ່ປີແບບທົບຕົ້ນຂອງການສົ່ງອອກສິນຄ້າ ແລະການບໍລິການໃນໄລຍະ 2010-2014 ຂອງ ສ.ປ.ປ.ລາວ** (ແບບຄຳນຶງເຖິງການເຕີບໂຕໃນສະໄໝໂດຍມີການດັດປັບຜົນຂອງການຂຶ້ນໆລົງໆ ຂອງອັດຕາໃນສະໄໝ) ແລະ ໃນໄລຍະ 2015-2019 ແມ່ນ 15,7 ສ່ວນຮ້ອຍ ແລະ 1,1 ສ່ວນຮ້ອຍຕາມລຳດັບ. ຮູບ 3.7 ແລະ 3.8 ສະແດງໃຫ້ເຫັນອັດຕາການຂະຫຍາຍຕົວສະເລ່ຍປະຈຳປີຂອງການສົ່ງອອກ ແລະ ນຳເຂົ້າຂອງຂະແໜງການສິນຄ້າໃນໄລຍະ 2015 ຫາ 2019 (ແບບໃຊ້ສູດຖອນຮາກຂັ້ນຫ້າ). ໃນບັນດາປະເທດຄູ່ສົມທຽບໃນພາກພື້ນ, ສປປ ລາວ ມີການຂະຫຍາຍຕົວຂອງການສົ່ງອອກຂອງຂະແໜງສິນຄ້າທີ່ດີເມື່ອແລໃສ່ກັບຄູ່ສົມທຽບ ເຊັ່ນ ກຳປູເຈຍ, ຫວຽດນາມ ແລະ ປະເທດອື່ນໆໃນສາກົນ. ໃນໄລຍະ 2015-2019, ນັບແຕ່ມີບົດ DTIS ກ່ອນໜ້ານີ້, ການສົ່ງອອກໃນຂະແໜງການສິນຄ້າເພີ່ມຂຶ້ນໂດຍສະເລ່ຍ 10 ສ່ວນຮ້ອຍຕໍ່ປີໃນຂະນະທີ່ການນຳເຂົ້າເພີ່ມຂຶ້ນໂດຍສະເລ່ຍ 1 ສ່ວນຮ້ອຍ. ການຫຼຸດລົງຂອງອັດຕາການເຕີບໂຕຂອງການນຳເຂົ້າສະທ້ອນໃຫ້ເຫັນເຖິງການສຳເລັດໂຄງການກໍ່ສ້າງຂະໜາດໃຫຍ່ຈຳນວນໜຶ່ງ.

## ຮູບ 3.7 ອັດຕາການເຕີບໂຕສະເລ່ຍຕໍ່ປີແບບທົບຕົ້ນ (CAGR) ໃນການສົ່ງອອກສິນຄ້າ, 2015-2019




*ແຫຼ່ງທີ່ມາ: ໄດ້ຈາກຕົວຊີ້ວັດການພັດທະນາຂອງໂລກ; ໝາຍເຫດ: ແກນຕັ້ງ ແມ່ນ CAGR ໃນການສົ່ງອອກສິນຄ້າ 2015-19; ແກນນອນ ຈາກຊ້າຍໄປຂວາ ແມ່ນຊື່ປະເທດ ຄື ກຳປູເຈຍ, ສປປ ລາວ, ໄທ, ຫວຽດນາມ, ອຸດສະເບກິດສະຖານ, ມົງໂກລີ, ມຽນມາ, ສາທາລະນະລັດກີກິສ, ເນປານ ແລະ ບູຖານ*

## ຮູບ 3.8 ອັດຕາການເຕີບໂຕສະເລ່ຍຕໍ່ປີແບບທົບຕົ້ນ (CAGR) ໃນການນຳເຂົ້າສິນຄ້າ, 2015-2019




*ແຫຼ່ງທີ່ມາ: ໄດ້ຈາກຕົວຊີ້ວັດການພັດທະນາຂອງໂລກ; ໝາຍເຫດ: ແກນຕັ້ງ ແມ່ນ CAGR ໃນການນຳເຂົ້າສິນຄ້າ 2015-19; ແກນນອນ ຈາກຊ້າຍໄປຂວາ ແມ່ນຊື່ປະເທດ ຄື ກຳປູເຈຍ, ສປປ ລາວ, ໄທ, ຫວຽດນາມ, ອຸດສະເບກິດສະຖານ, ເນປານ, ມົງໂກລີ, ສາທາລະນະລັດກີກິສ, ມຽນມາ ແລະ ບູຖານ*

67. **ການສົ່ງອອກເພີ່ມຂຶ້ນຫຼາຍກວ່າສອງເທົ່າລະຫວ່າງປີ 2012 ແລະ 2019.** ການສົ່ງອອກແຮ່ທາດເພີ່ມຂຶ້ນສາມເທົ່າເປັນເກືອບ 700 ລ້ານໂດລາສະຫະລັດໃນປີ 2013 ເນື່ອງຈາກການຜະລິດບໍ່ແຮ່ຂະຫຍາຍໂຕ. ໃນປີ 2017 ການສົ່ງອອກທັງໝົດເພີ່ມຂຶ້ນເກືອບ 90 ສ່ວນຮ້ອຍ ເນື່ອງຈາກ ສປປ ລາວ ໄດ້ເລີ່ມສົ່ງອອກພະລັງງານໄຟຟ້າຈາກເຂື່ອນໄຟຟ້ານ້ຳຕົກແຫ່ງໃໝ່. ການສົ່ງອອກແຮ່ທາດ ແລະໂລຫະມີຄ່າຍັງຄົງມີຄວາມສຳຄັນຢູ່ຕະຫຼອດມາ, ເຖິງວ່າສ່ວນແບ່ງແບບຫຼຸບຖານຂອງມັນໄດ້ຫຼຸດລົງຍ້ອນການສົ່ງອອກ ໄຟຟ້າຂະຫຍາຍອອກໃນປີ 2017. ມູນຄ່າການສົ່ງອອກທອງແດງມີການຜັນ

ຜອນປ່ຽນແປງຢ່າງກວ້າງຂວາງກັບການປ່ຽນແປງຂອງລາຄາສິນຄ້າຂັ້ນຕົ້ນ. ສ່ວນແບ່ງການສົ່ງອອກກະສິກຳ ແລະ ອຸດສາ ຫະກຳປຸງແຕ່ງກໍເຫັນວ່າຫຼຸດລົງເຊັ່ນກັນ (ເບິ່ງຮູບ 3.9 ແລະ 3.10); ແນວໃດກໍ່ຕາມ, ອັນນີ້ໄດ້ປິດບັງການເພີ່ມຂຶ້ນຢ່າງຫຼວງຫຼາຍໃນມູນຄ່າການສົ່ງອອກຢ່າງແທ້ຈິງ. ຈາກພື້ນຖານທີ່ຂ້ອນຂ້າງນ້ອຍໃນປີ 2012-2013, ການສົ່ງອອກຜັກ, ໝາກໄມ້, ໝາກໄມ້ເປືອກແຂງກິນໃນ, ເຄື່ອງປະກອບໄຟຟ້າ, ຢາງພາລາ, ແລະ ພລາສຕິກລວນແຕ່ປະສົບກັບການເຕີບໂຕຢ່າງໄວວາ. ການປ່ຽນແປງທີ່ໂດດເດັ່ນອີກອັນໜຶ່ງໃນໄລຍະ 2013-2019 ແມ່ນການຂະຫຍາຍຕົວຢ່າງໄວວາຂອງການສົ່ງອອກໄມ້ເນື້ອເຍື່ອຈາກຕໍ່າກວ່າ 1 ລ້ານໂດລາສະຫະລັດໃນປີ 2013 ເປັນ 286 ລ້ານໂດລາໃນປີ 2019. ຂະແໜງເຄື່ອງນຸ່ງຫົ່ມທີ່ໃຊ້ແຮງງານຫຼາຍ, ທີ່ສົ່ງອອກໄປຍັງພາກພື້ນ ແລະ ສະຫະພາບເອີຣົບ ຍັງຄົງທີ່ເວົ້າລວມ ຕະຫຼອດໄລຍະນີ້.

## ຮູບ 3.9 ການສົ່ງອອກ ຂອງ ສປປ ລາວ ປີ 2013




*ແຫລ່ງທີ່ມາ: ໄດ້ຈາກທາງແກ້ຂອງການຄ້າໂລກແບບເຊື່ອມໂຍງ*

## ຮູບ 3.10 ການສົ່ງອອກ ຂອງ ສປປ ລາວ ປີ 2019




*ແຫລ່ງທີ່ມາ: ໄດ້ຈາກທາງແກ້ຂອງການຄ້າໂລກແບບເຊື່ອມໂຍງ*

68. **ຈຳນວນສິນຄ້າສົ່ງອອກໄດ້ເພີ່ມຂຶ້ນ. ຕັ້ງແຕ່ມີບົດ DTIS ທີ່ຜ່ານມາ (2012) ສປປ ລາວ ໄດ້ເພີ່ມການສົ່ງອອກສິນຄ້າຫລາຍຊະນິດ.** ໃນປີ 2012 ສປປ ລາວ ໄດ້ສົ່ງອອກສິນຄ້າທັງໝົດ 550 ຜະລິດຕະພັນຈາກຈຳນວນຜະລິດຕະພັນທັງໝົດ 5.205 (ລະຫັດສາລະບານອັດຕາພາສີເອກະພາບ HS ສູງສຸດໃນລະດັບ 6 ຕົວເລກ). ໃນປີ 2019 ນີ້ໄດ້ເພີ່ມຂຶ້ນສອງເທົ່າເປັນ 1.082 ຜະລິດຕະພັນ. ຂອບເຂດການເພີ່ມຂຶ້ນຂອງຜະລິດຕະພັນໄດ້ສະທ້ອນໃຫ້ເຫັນການມີການຄ້າສິນຄ້າເຫລົ່ານີ້ກັບປະເທດເພື່ອນບ້ານ. ຮູບທີ 3.11 ສະແດງໃຫ້ເຫັນມູນຄ່າການນຳເຂົ້າ ແລະ ສົ່ງອອກຕາມຂະແໜງການສຳລັບປີ 2019 ແລະ ຮູບ 3.12 ສະແດງເຖິງດຸນຂອງການຄ້າຕາມຂະແໜງການສຳລັບປີ 2019.

## ຮູບ 3.11 ການນຳເຂົ້າ ແລະ ສົ່ງອອກ ຂອງ ສປປ ລາວຕາມຂະແໜງການ 2019




*ແຫລ່ງທີ່ມາ: ໄດ້ຈາກທາງແກ້ຂອງການຄ້າໂລກແບບເຊື່ອມໂຍງ*

*ໝາຍເຫດ: ແກນນອນນັບແຕ່ຊ້າຍໄປຂວາລາຍການສິນຄ້າ ມີ: ສັດ, ພືດຜັກ, ສະບຽງອາຫານ, ແຮ່ທາດ, ເຄມີພັນ, ປະລັດສະຕິກ/ຢາງພາລາ, ໜັງສັດ, ໄມ້, ແຜນແພ ແລະ ເຄື່ອງນຸ່ງຫົ່ມ, ເກີບ, ຫີນແກ້ວ/ແວ່ນແກ້ວ, ໂລຫະ, ເຄື່ອງໄຟຟ້າ ,ພາຫະນະຂົນສົ່ງ, ແລະ ອື່ນໆ; ແກນຕັ້ງ ເປັນມູນຄ່າຫົວໜ່ວຍລ້ານໂດລາ; ສີຟ້າແມ່ນ ການນຳເຂົ້າ ແລະ ສີສົ້ມແມ່ນ ການສົ່ງອອກ.*

## ຮູບ 3.12 ດຸນຂອງການຄ້າສິນຄ້າ ຕາມຂະແໜງການ ຂອງ ສປປ ລາວ, 2019




*ແຫລ່ງທີ່ມາ: ໄດ້ຈາກທາງແກ້ຂອງການຄ້າໂລກແບບເຊື່ອມໂຍງ*

ໝາຍເຫດ: ແກນນອນແມ່ນດຸນການຄ້າ, ແກນຕັ້ງ ແມ່ນມູນຄ່າຫົວໜ່ວຍລ້ານໂດລາ; ແຕ່ລະທ່ອນແມ່ນລາຍການສິນຄ້າຈາກຊ້າຍໄປຂວາ ຄື ສີຟ້າເຂັ້ມແມ່ນສັດ, ສີສົ້ມ: ພືດຜັກ, ສີເທົາ: ສະບຽງອາຫານ, ສີເຫລືອງເຂັ້ມ: ແຮ່ທາດ, ສີຟ້າອ່ອນ: ເຄມີພັນ, ສີຂຽວ: ປະລັດສະຕິກ/ຢາງພາລາ, ສີຟ້າເຂັ້ມສຸດ: ໜັງສັດ, ສີສົ້ມເຂັ້ມ: ໄມ້, ສີດຳ: ແຜນແພ ແລະ ເຄື່ອງນຸ່ງຫົ່ມ, ສີນ້ຳຕານ: ເກີບ, ສີຂຽວມືດ: ຫີນແກ້ວ/ແວ່ນແກ້ວ, ສີຂຽວເຂັ້ມ: ໂລຫະ, ສີຟ້າ: ເຄື່ອງໄຟຟ້າ , ສີສົ້ມຈາງ: ພາຫະນະຂົນສົ່ງ, ແລະ ສີເທົາ: ອື່ນໆ

69. **ສປປ ລາວ ຄ້າຂາຍພາຍໃນອາຊີເປັນຕົ້ນຕໍ.** ໃນປີ 2019 ສປປ ລາວ ໄດ້ນຳເຂົ້າຫຼາຍກວ່າ 85 ສ່ວນຮ້ອຍຂອງສິນຄ້ານຳເຂົ້າຈາກ 3 ປະເທດຄື: ໄທ, ຫວຽດນາມ ແລະ ຈີນ. ທັງສາມເສດຖະກິດໃກ້ຄຽງນີ້ຍັງກວມເອົາຫຼາຍກວ່າ 85 ສ່ວນຮ້ອຍຂອງການສົ່ງອອກ.

## ຮູບ 3.13 ທິດທາງການຄ້າ ຂອງ ສປປ ລາວ: ການນຳເຂົ້າ 2019 (ມູນຄ່າ ເປັນຫົວໜ່ວຍພັນໂດລາ)




*ແຫລ່ງທີ່ມາ: ໄດ້ຈາກຖານຂໍ້ມູນທາງແກ້ຂອງການຄ້າໂລກແບບເຊື່ອມໂຍງ https://wits.worldbank.org/*

## ຮູບ 3.14 ທິດທາງການຄ້າ ຂອງ ສປປ ລາວ: ການສົ່ງອອກ 2019(ມູນຄ່າເປັນຫົວໜ່ວຍພັນໂດລາ)




*ແຫລ່ງທີ່ມາ: ໄດ້ຈາກຖານຂໍ້ມູນທາງແກ້ຂອງການຄ້າໂລກແບບເຊື່ອມໂຍງ https://wits.worldbank.org/*

70. **ສປປ ລາວ ຄາດວ່າຈະຫລຸດພົ້ນຈາກສະຖານະພາບປະເທດດ້ອຍພັດທະນາ (LDC) ໃນປີ 2026.** ໃນຖານະທີ່ເປັນປະເທດ LDC, ສປປ ລາວ ໄດ້ຮັບສິດທິພິເສດທົ່ວໄປທາງດ້ານພາສີ (GSP) ຈາກ 24 ຕະຫຼາດ/ປະເທດ. ພາຍໃຕ້ GSP, ປະເທດຈຳນວນໜຶ່ງ, ສ່ວນໃຫຍ່ແມ່ນປະເທດທີ່ພັດທະນາກວ່າ, ມີການໃຫ້ສິດທິພິເສດທາງດ້ານພາສີແບບຝ່າຍດຽວໃຫ້ແກ່ບັນດາປະເທດທີ່ມີເງື່ອນໄຂໄດ້ຮັບ ເຊັ່ນ ປະເທດທີ່ມີລະດັບການພັດທະນາເສດຖະກິດໜ້ອຍກວ່າ. ພາຍໃຕ້ WTO, ພື້ນຖານທາງດ້ານກົດໝາຍສຳລັບການໃຫ້ສິດທິພິເສດແບບຝ່າຍດຽວນີ້ ແມ່ນການຫລຸດອັດຕາພາສີໃຫ້ ຫລື ການບໍ່ເກັບພາສີ ໂດຍມີບົດບັນຍັດທີ່ອະນຸຍາດໃຫ້ສະເພາະດ້ານ ຄື ການໃຫ້ສິດທິພິເສດທາງການຄ້າຂອງປະເທດທີ່ພັດທະນາແລ້ວໃຫ້ແກ່ປະເທດກຳລັງພັດທະນາ ຫລື ການໃຫ້ສິດທິພິເສດທາງການຄ້າລະຫວ່າງປະເທດກຳລັງພັດທະນາດ້ວຍກັນ. ໃນປີ 2020, ITC ໄດ້ຄາດຄະເນວ່າການສູນເສຍສິດທິປະໂຫຍດທີ່ຈະເກີດຂຶ້ນໄດ້ໃນປີ 2024 ອາດສາມາດສົ່ງຜົນກະທົບໜ້ອຍກວ່າ 1,2 ສ່ວນຮ້ອຍ ຂອງການສົ່ງອອກທັງໝົດ.[8] ການວິເຄາະ ຂອງ ITC ໄດ້ນຳໃຊ້ແບບຈຳລອງຄວາມດູນດ່ຽງແບບແຍກສ່ວນໂດຍອີງໃສ່ລະດັບການຄ້າທີ່ຄາດຄະເນໃນປີ 2024; ອັນນີ້ເປັນເຫດຜົນຂອງການທັນປັ່ນຢ່າງຕໍ່ເນື່ອງຂອງການສົ່ງອອກຂອງ ສປປ ລາວ ໄປສູ່ຕະ ຫຼາດທີ່ເຕີບໂຕໄວຂຶ້ນ ທີ່ບໍ່ອີງໃສ່ GSP. ການວິເຄາະຍັງໄດ້ຄາດຄະເນທ່າແຮງການຄ້າທີ່ຍັງບໍ່ໄດ້ເກີດຂຶ້ນສຳລັບການສົ່ງອອກຂອງ ສປປ ລາວ ໂດຍອີງໃສ່ທ່າແຮງປຽບທຽບທີ່ປາກົດມີຢູ່ແລ້ວ.[9] ໃນການປະເມີນຜົນກະທົບ, ມັນຍັງມີຄວາມສຳຄັນທີ່ຈະວັດແທກຄວາມແຕກຕ່າງໃນການເຂົ້າເຖິງຕະຫລາດທີ່ໄດ້ຮັບສິດທິພິເສດ ເຊິ່ງຈະເປັນຜົນມາຈາກການຫລຸດພົ້ນດັ່ງກາວ. ໃນຫຼາຍຕະຫຼາດທີ່ໃຫ້ GSP, ສປປ ລາວ ໄດ້ຮັບຜົນປະໂຫຍດ

8. Decreuz Yvan ແລະ Julia Spies (2019), ຜົນຕໍ່ການຄ້າຂອງສປປ ລາວ ພາຍຫລັງຫລຸດພົ້ນຈາກສະຖານະພາບປະເທດດ້ອຍພັດທະນາ, ITC.
9. ວິທີວິທະຍາແມ່ນໄດ້ລະບຸໄວ້ໃນ Decreuz Yvan ແລະ Julia Spies (2016), ການປະເມີນທ່າແຮງການສົ່ງອອກ.https://umbraco.exportpotential.intracen.org/media/1089/epa-methodology_141216.pdf

ຈາກສັນຍາການຄ້າເສລີ (FTAs) ທີ່ມີຢູ່ແລ້ວ ຫຼື ອາດຈະກັບຄືນສູ່ລະບົບສິດທິພິເສດອື່ນໆທາງດ້ານພາສີແບບຝ່າຍດຽວ ທີ່ມີໃຫ້ແກ່ປະເທດທີ່ກຳລັງພັດທະນາ. ປະເທດແລະພາກພື້ນທີ່ໃຫ້ສິດທິພິເສດຕ່າງໆແກ່ LDC ແມ່ນສະແດງຢູ່ຂ້າງລຸ່ມນີ້ ໃນຕາຕະລາງ 3.1.

### ຕາຕະລາງ 3.1 ອັດຕາພາສີທີ່ບໍ່ເປັນໄປຕາມແບບເດີມສຳລັບ ສປປ ລາວ ພາຍຫລັງການຫລຸດພົ້ນຈາກສະຖານະພາບປະເທດດ້ອຍພັດທະນາ

| ປະເທດ/ພາກພື້ນທີ່ໃຫ້ສິດທິພິເສດແກ່ປະເທດດ້ອຍພັດທະນາ | ອັດຕາພາສີທີ່ບໍ່ເປັນໄປຕາມແບບເດີມ ພາຍຫລັງການຫລຸດພົ້ນ |
|---|---|
| ອີຢູ 27, ສະຫະລາຊະອານາຈັກ | GSP/ GSP + (ສຳລັບ ອີຢູ ປີ 2029, ພາຍຫລັງໄລຍະຂ້າມຜ່ານ 3 ປີ ເຊັ່ນດຽວກັບຄວາມຕົກລົງ EBA (ໂຄງການທີ່ສະຫະພາບເອີຣົບໃຫ້ສິດທິພິເສດດ້ວຍການຍົກເວັ້ນການເກັບພາສີນຳເຂົ້າ ແລະ ຍົກເລີກການກຳນົດໂກຕານຳເຂົ້າໃຫ້ແກ່ສິນຄ້ານຳເຂົ້າຈາກກຸ່ມປະເທດດ້ອຍພັດທະນາ ສຳລັບທຸກປະເພດສິນຄ້າຍົກເວັ້ນແຕ່ອາວຸດຍຸດໂທປະກອນ) ສຳລັບສະຫະລາຊະອານາຈັກ 2026 ແມ່ນໃຊ້ ຂອບ ສິດທິພິເສດ GSP ທົ່ວໄປ |
| ອາກເມນີ, ເບລາຣຸດຊີ, ການາດາ, ກາຊັກສະຖານ, ກຽກກີດສະຖານ, ນອກແວ, ສະຫະພັນລັດເຊຍ, ສະວິດ, ຕວັກກີ | GSP |
| ຊີເລ, ຈີນໄຕເປ, ອິດສະລັງ, ມົງເຕເນໂກຣ, ຕັດຈິກິດສະຖານ | MFN |
| ອົດສະຕຣາລີ*, ຈີນ*, ອິນເດຍ, ຍີ່ປຸ່ນ*, ນູແວນເຊລັງ*, ສາທາລະນະລັດເກົາຫລີ, ສີລັງກາ, ໄທ. | ສັນຍາການຄ້າພາກພື້ນ* ແລະ GSP |

*ແຫລ່ງຂໍ້ມູນ: ປັບມາຈາກ Decreux ແລະ Spies (2019)*

## 3.2 ຜົນກະທົບຕໍ່ການຄ້າ ຂອງການຫລຸດພົ້ນຈາກສະຖານະພາບປະເທດດ້ອຍພັດທະນາ

71. **ສປປ ລາວ ມີສິດໄດ້ຮັບ GSP ສຳລັບປະເທດທີ່ກຳລັງພັດທະນາ ໃນ EU ແລະ ອັງກິດຫຼັງຈາກຫລຸດພົ້ນຈາກສະຖານະພາບປະເທດດ້ອຍພັດທະນາ.** 27 ປະເທດຂອງສະຫະພາບເອີຣົບ (EU) ໄດ້ສະເຫນີໃຫ້ GSP + ຫຼື GSP ແກ່ LDCs ພາຍໃຕ້ໂຄງການທຸກສິ່ງທຸກຢ່າງຍົກເວັ້ນອາວຸດ (EBA) ໂດຍເຜື່ອເອົາໄວ້ໃຫ້ມີໄລຍະຂ້າມຜ່ານໂດຍມີການຍົກເວັ້ນພາສີ ແລະ ບໍ່ກຳນົດໂກຕາໃຫ້ສິນຄ້ານຳເຂົ້າ (DFQF) ເປັນເວລາສາມປີ. GSP+ ແມ່ນມີໃຫ້ແກ່ບັນດາປະເທດທີ່ກຳລັງພັດທະນາທີ່ມຸ່ງຫມັ້ນທີ່ຈະພັດ ທະນາແບບຍືນຍົງ ແລະ ໃຊ້ວິທີການປົກຄອງທີ່ດີ. ນັບຕັ້ງແຕ່ ການອອກຈາກອີຢູ (Brexit), ສະຫະລາ ຊະອານາຈັກ(ອັງກິດ) ໄດ້ສືບຕໍ່ໃຫ້ການຍົກເວັ້ນພາສີໃຫ້ກັບ LDCs ພາຍໃຕ້ຂອບປະເທດດ້ອຍພັດທະນາ (ທຽບເທົ່າກັບ EBA). ໃນໄລຍະເຈລະຈາ Brexit, ອັງກິດໄດ້ພິມເຜີຍແຜ່ບົດແນະນຳທີ່ຊີ້ໃຫ້ເຫັນວ່າຈະສືບຕໍ່ນຳໃຊ້ເງື່ອນໄຂການເຂົ້າເຖິງຕະຫຼາດຂອງ EU ຄືແບບເກົ່າ. ຢ່າງໃດກໍ່ຕາມ, ມັນບໍ່ຊັດເຈນວ່າອັງກິດຈະເຜື່ອເອົາໄວ້ໃຫ້ບໍ ສຳລັບໄລຍະຂ້າມຜ່ານຫລັງຈາກຫລຸດພົ້ນ. ປາກົດວ່າ ໃນປີ 2026, ສປປ ລາວ ຈະຕົກຢູ່ພາຍໃຕ້ຂອບ GSP ທົ່ວໄປຂອງເຂົາເຈົ້າ[10] ໃນຂະນະທີ່ການເຂົ້າເຖິງຕະຫຼາດ EU ຈະສືບຕໍ່ເປັນ DFQF ຈົນຮອດປີ 2029.

72. **ສັນຍາການຄ້າເສລີເມື່ອບໍ່ດົນມານີ້ກໍ່ຍັງໃຊ້ປະໂຫຍດໄດ້ ແລະ ເປັນແຫຼ່ງສຳຄັນໃນການເຂົ້າເຖິງຕະຫຼາດ.** ປັດຈຸບັນ 9 ປະເທດທີ່ໃຫ້ສິດທິພິເສດແກ່ LDC ຍັງມີໂຄງການ GSP ທີ່ໃຊ້ການຢູ່ ເພື່ອຫຼຸດອັດຕາພາສີໃຫ້ກັບປະເທດທີ່ກຳລັງພັດທະນາ. ໃນຖານະທີ່ເປັນພາຄີຂອງອາຊຽນ ແລະ RCEP, ສປປ ລາວ ກໍ່ສາມາດດຳເນີນການຄ້າຕາມສັນຍາການຄ້າເສລີທີ່ມີຢູ່ແລ້ວ. FTA ລະຫວ່າງອົດສະຕຣາລີ ແລະ ນູແວນເຊລັງ/ນິວຊີແລນ ກັບອາຊຽນ ແມ່ນເລີ່ມແຕ່ປີ 2010. ສປປ ລາວ ເປັນປະເທດທີ່ລົງນາມໃນສັນຍາ RCEP ເຊິ່ງມີຜົນບັງຄັບໃຊ້ໃນປີ 2022 ເປັນການຈັດຕຽມໃຫ້ມີການຄ້າເສລີ ແລະ ລວມມີ ອົດສະຕຣາລີ, ຈີນ, ຍີ່ປຸ່ນ, ສ.ເກົາຫຼີ ແລະ ນິວຊີແລນ. ນອກນີ້, ສປປ ລາວ ໄດ້ຕົກລົງສັນຍາການຄ້າສອງຝ່າຍກັບຈີນແບບໄດ້ຮັບສິດທິພິເສດ.

73. **ການຂ້າມຜ່ານໄປສູ່ອັດຕາພາສີທົ່ວໄປ MFN ແມ່ນ ນຳໃຊ້ພຽງແຕ່ກັບຫ້າປະເທດເຊິ່ງຄິດເປັນຊັດສ່ວນການຄ້າທີ່ຢູ່ໃນວົງຈຳກັດ.** ມີພຽງແຕ່ຫ້າປະເທດ (ຊີເລ, ຈີນໄຕເປ, ອິດສະລັງ, ມົງເຕເນໂກຣ ແລະ ຕັດຈິກິດສະຖານ) ເຊິ່ງ, ເມື່ອຫລຸດພົ້ນແລ້ວ ແມ່ນບໍ່ໄດ້ຈັດໃຫ້ມີ GSP ສຳລັບປະເທດທີ່ກຳລັງພັດທະນາ. ສຳລັບປະເທດເຫຼົ່ານີ້, ຫລັງຈາກຫລຸດພົ້ນແລ້ວ ສປປ ລາວ ຄົງຈະຊື້ຂາຍພາຍໃຕ້ອັດຕາພາສີທົ່ວໄປ MFN ຂອງ WTO. ຢ່າງໃດກໍ່ຕາມ, ສປປ ລາວ ເກືອບບໍ່ມີການຄ້າກັບ 5 ປະເທດດັ່ງກາວ.

10. https://www.gov.uk/government/publications/trading-with-developing-nations ຕາຕະລາງສິດທິພິເສດບໍ່ອ້າງອີງເຖິງໄລຍະເວລາຂ້າມຜ່ານເມື່ອໃດປະເທດຫາກຫລຸດພົ້ນແລ້ວຈາກສະຖານະພາບປະເທດ LDC. ດັ່ງນັ້ນຈຶ່ງເຂົ້າໃຈເອົາວ່າ ການສົ່ງອອກ ຂອງສປປ ລາວຈະມີເງື່ອນໄຂໄດ້ຮັບສິດທິພິເສດທົ່ວໄປທາງດ້ານພາສີ GSP ໃນປີ 2026.

74. **ການສູນເສຍທາງດ້ານການຄ້າຈາກການຫລຸດພົ້ນ ຂອງ ສປປ ລາວ ມີການປະເມີນໄວ້ວ່າຈະຕໍ່າກວ່າ 1,2 ສ່ວນຮ້ອຍຂອງການສົ່ງອອກທີ່ໄດ້ຄາດໄວ້ສໍາລັບອະນາຄົດ.** ສິດທິພິເສດທາງດ້ານການຄ້າ ທາງເລືອກອື່ນ ຂອງ ສປປ ລາວ ພາຍຫຼັງຫລຸດພົ້ນຈາກສະຖານະພາບດ້ອຍພັດທະນາ, ບວກເຂົ້າກັບອັດຕາການເຕີບໂຕຂອງການສົ່ງອອກທີ່ຄາດວ່າຈະສູງຂຶ້ນໃນພາກພື້ນອາຊີ-ປາຊີຟິກ, ຈະຮອງຮັບໃຫ້ແກ່ການຫຼຸດຜ່ອນຜົນກະທົບທາງລົບຈາກການຫລຸດພົ້ນ. ໂດຍນໍາໃຊ້ຂໍ້ມູນການຄ້າແຕ່ປີ 2014-2018 ແລະ ຄາດຄະເນເຖິງປີ 2024, ITC ໄດ້ຄາດຄະເນການຂາດຫາຍໄປຂອງມູນຄ່າການຄ້າຈະຫນ້ອຍກວ່າ 1,2 ສ່ວນຮ້ອຍຂອງ ການສົ່ງອອກທີ່ຄາດຄະເນໄວ້ ຂອງ ສປປ ລາວ. ປັດຈຸບັນ ສປປ ລາວ ມີກໍານົດທີ່ຈະຫລຸດພົ້ນໃນປີ 2026, ອັດຕາການເຕີບໂຕ ຂອງການສົ່ງອອກທີ່ສູງຂຶ້ນໃນບັນດາປະເທດທີ່ບໍ່ແມ່ນ LDC ແລະ ການປັບປຸງການເຂົ້າເຖິງຕະຫຼາດຢ່າງຕໍ່ເນື່ອງພາຍໃຕ້ FTA ທີ່ມີຢູ່ແລ້ວ ຄາດຫວັງວ່າຈະຫຼຸດຜ່ອນການສູນເສຍທາງການຄ້າໄດ້ຕື່ມອີກ. ຮູບ 3.15 ສະແດງໃຫ້ເຫັນການຄາດຄະເນການສູນເສຍທາງການຄ້າຈາກການຫລຸດພົ້ນສະຖານະພາບປະເທດດ້ອຍພັດທະນາໂດຍແບ່ງຕາມປະເທດທີ່ໃຫ້ສິດທິພິເສດ.

75. **ການສູນເສຍທາງດ້ານຕະຫຼາດທີ່ຄາດຫວັງໄວ້ ແມ່ນກະຈຸກຕົວຢູ່ໃນ EU, ສະຫະລາຊະອານາຈັກ/ອັງກິດ, ຍີ່ປຸ່ນ ແລະ ການາດາ.** ການວິເຄາະຂອງ ITC ຄາດຄະເນການສູນເສຍທີ່ບໍ່ມີໄນຍະສໍາຄັນ ຫຼື ເທົ່າກັບສູນຢູ່ໃນຕະຫຼາດທີ່ສໍາຄັນ ຂອງ ຈີນ, ໄທ ແລະຫວຽດນາມ. ເກືອບສາມສ່ວນສີ່ຂອງການຫຼຸດລົງຂອງການຄ້າທີ່ໄດ້ຄາດຫວັງໄວ້, ອີງຕາມການຫລຸດພົ້ນໃນປີ 2024, ຄາດວ່າຈະມຸ້ງໄປທີ່ EU (73 ລ້ານໂດລາ). ຢູ່ພາຍໃນສະຫະພາບເອີຣົບ, ເຢຍລະມັນແມ່ນຕະຫຼາດໃຫຍ່ທີ່ສຸດ ກວມເອົາປະມານ 27 ລ້ານໂດລາ. ການສູນເສຍທາງການຄ້າທີ່ອາດເກີດຂຶ້ນໄດ້ ກັບອັງກິດ ແລະ ການາດາກວມເອົາພຽງແຕ່ 10 ສ່ວນຮ້ອຍກວ່າໆ ຂອງການຂາຍທັງຫມົດໄປຍັງຕະຫຼາດເຫຼົ່ານັ້ນ.

76. **ການສູນເສຍທາງການຄ້າທີ່ອາດຈະເກີດຂຶ້ນແມ່ນມີຈຸດລວມຢູ່ທີ່ເຄື່ອງນຸ່ງຫົ່ມ/ເຄື່ອງຕັດຫຍິບ, ນໍ້າຕານ, ເກີບ ແລະ ເຂົ້າ.** ການສູນເສຍທາງການຄ້າທີ່ອາດຈະເກີດຂຶ້ນແມ່ນຮອບຮອມໄປທີ່ຜະລິດຕະພັນຈໍານວນຫນ້ອຍໜຶ່ງ. ມີພຽງແຕ່ 21 ຜະລິດຕະພັນ ລະຫັດ 6 ຕົວເລກໃນລະບົບ HS ເທົ່ານັ້ນ ທີ່ຄາດວ່າ ການສົ່ງອອກຈະຫຼຸດລົງຫຼາຍກວ່າ 1 ລ້ານໂດລາ. ການສົ່ງອອກເຄື່ອງນຸ່ງກວມເກືອບ 2/3 ຂອງການສູນເສຍທາງການຄ້າທີ່ຄາດຄະເນ, ຖັດມາແມ່ນການສົ່ງອອກນໍ້າຕານໄປຍັງ EU ແລະ ອັງກິດ (15,3 ລ້ານ USD). ITC ຄາດຄະເນວ່າຂະແໜງເກີບໜັງ ແລະ ເຂົ້າສານ ອາດສາມາດສູນເສຍປະມານ 4 ລ້ານໂດລາ ແລະ 2 ລ້ານໂດລາຕາມລໍາດັບ. ຂະແໜງເຄື່ອງນຸ່ງຫົ່ມ ແລະ ເກີບ ອາດຈະໄດ້ຮັບຜົນປະໂຫຍດຈາກ GSP+, ຖ້າ ສິນຄ້າເຫລົ່ານີ້ຫາກໄດ້ເຮັດຕາມລະບຽບແຫລ່ງກໍາເນີດໂດຍມີການປັບປຸງສະພາບເຖິງສອງຕໍ່.

**ຮູບ 3.15 ສ່ວນແບ່ງຂອງການສູນເສຍທາງການຄ້າແບບຄາດຄະເນ ຂອງ ສປປ ລາວ ແຍກຕາມຕະຫລາດທີ່ໃຫ້ສິດທິພິເສດແກ່ບັນດາປະເທດດ້ອຍພັດທະນາ LDC**




*ແຫລ່ງຂໍ້ມູນ: ປັບມາຈາກ Decreux ແລະ Spies (2020)*

## ຮູບ 3.16 ການສົ່ງອອກທີ່ມີທ່າແຮງບົ່ມຊ້ອນແຍກເປັນປະເທດ ສໍາລັບຜະລິດຕະພັນສິນຄ້າທີ່ ກຸ່ມປະເທດ LDC ໄດ້ຮັບສິດທິພິເສດທາງການຄ້າ




*ໝາຍເຫດ: ສ. ເກົາຫລີ ROK. ແຫລ່ງຂໍ້ມູນ: ປັບມາຈາກ Decreux ແລະ Spies (2020)*

77. **ສປປ ລາວ ມີກາລະໂອກາດອັນໃຫຍ່ຫຼວງໃນການເພີ່ມການສົ່ງອອກ ດ້ວຍວິທີການສົ່ງເສີມການຄ້າທີ່ມີເປົ້າໝາຍຫຼາຍຂຶ້ນ ໄປຍັງທັງຕະຫຼາດເກົ່າ ແລະ ຕະຫຼາດໃໝ່.** ການວິເຄາະ ຂອງ ITC ກ່ຽວກັບທ່າແຮງການສົ່ງອອກໄດ້ກໍານົດກາລະໂອກາດສໍາລັບການເພີ່ມການສົ່ງອອກໄປຍັງຕະຫຼາດອື່ນນອກເໜືອໄປຈາກຜູ້ທີ່ໃຫ້ສິດທິພິເສດແກ່ LDC. ການວິເຄາະຍັງໄດ້ຊີ້ໃຫ້ເຫັນເຖິງວິທີການສົ່ງເສີມການຄ້າແບບມີເປົ້າຫມາຍຫຼາຍຂຶ້ນອາດສາມາດຊ່ວຍບັນເທົາຜົນກະທົບຂອງການຫຼຸດລົງ ຫຼືການລົບລ້າງສິດທິພິເສດທາງດ້ານພາສີ. ບົດລາຍງານຂອງ ITC ໄດ້ພິຈາລະນາສິ່ງນີ້ ມີທ່າອ່ຽງຈະເປັນຢ່າງນັ້ນ ສໍາລັບການສົ່ງອອກເກີບ, ເຂົ້າ, ສານເຄມີ, ຜັກ ແລະ ອາຫານ ໄປ EU, ສໍາລັບການສົ່ງອອກເກີບໄປການາດາ ແລະ ຜະ ລິດຕະພັນອາຫານໄປຍີ່ປຸ່ນ ແລະ ສະຫະລາຊະອານາຈັກ. ພິໄສທີ່ຊ້ອນຊ້າງແຄບ ຂອງຜະລິດຕະພັນເຄື່ອງນຸ່ງຫົ່ມທີ່ສົ່ງອອກພາຍໃຕ້ສິດທິພິເສດໃຫ້ແກ່ LDC ຈະປະສົບກັບການສູນເສຍທີ່ໃຫຍ່ທີ່ສຸດທີ່ອາດເກີດຂຶ້ນໄດ້; ແນວໃດກໍ່ຕາມ, ຄວາມຕ້ອງການສາກົນຍັງສືບຕໍ່ຂະຫຍາຍຕົວ ແລະ ມີທ່າແຮງບົ່ມຊ້ອນສໍາລັບການສົ່ງອອກເພີ່ມເຕີມ. ບົດລາຍງານຂອງ ITC ໄດ້ກໍານົດກາລະໂອກາດທາງດ້ານຕະຫຼາດສໍາລັບຜະລິດຕະພັນທີ່ສໍາຄັນທີ່ສົ່ງອອກພາຍໃຕ້ສິດທິພິເສດໃຫ້ແກ່ LDC ທີ່ມີຢູ່ແລ້ວ. ເຫັນໄດ້ຈາກຮູບ 3.16 ວ່າມີທ່າແຮງອັນໃຫຍ່ຫຼວງສໍາລັບການເຕີບໂຕໃນປະເທດໃກ້ຄຽງ ຄື ຈີນ, ໄທ, ແລະ ຫວຽດນາມ. ຜະລິດ ຕະພັນກະສິກໍາ ໂດຍສະເພາະ ຜັກ, ໝາກໄມ້, ເຂົ້າ ແລະ ກາເຟ ມີຊັດສ່ວນກວມເອົາຫຼາຍກວ່າ 75 ສ່ວນຮ້ອຍ ຂອງຈໍານວນລວມ.

78. **ການສູນເສຍທາງການຄ້າທີ່ອາດເກີດຂຶ້ນໄດ້ ຈາກການຫລຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ ຈະຖືກຊົດເຊີຍດ້ວຍການຫຼຸດຜ່ອນຕົ້ນທຶນທາງການຄ້າ, ເຮັດໃຫ້ມີຄວາມຫຼາກຫຼາຍ ທາງດ້ານຜະລິດຕະພັນສິນຄ້າ, ຕະຫຼາດທີ່ເພີ່ມຂຶ້ນ ແລະ ການເຕີບໂຕ ຂອງການສົ່ງອອກ.** ຖ້າເປັນໄປໄດ້ ສປປ ລາວ ຄວນສືບຕໍ່ຍາດແຍ່ງເອົາກາລະໂອກາດທັນໄປສູ່ສິດທິພິເສດຂອງປະເທດກໍາລັງພັດທະນາ. ປັດຈຸບັນ, ສິ່ງດັ່ງກ່າວຈະນໍາໄປໃຊ້ໃນການຄ້າກັບ EU ແລະ ອັງກິດ. ສປປ ລາວ ຍັງຈະໄດ້ຮັບຜົນປະ ໂຫຍດຈາກການເຂົ້າເຖິງຕະຫຼາດທີ່ມີປະສິດທິພາບດີຂຶ້ນ ເນື່ອງຈາກມີການຈັດຕັ້ງປະຕິບັດ FTA ຂອງ ອາຊຽນ ກັບອົດສະຕາລີ ແລະນິວຊີແລນ ແລະ RCEP. ແນວໃດກໍ່ຕາມ, ສປປ ລາວ ຍືນຢັດທີ່ຈະເຮັດໃຫ້ກາລະໂອກາດການສົ່ງອອກ ທີ່ມີຄວາມສໍາຄັນກວ່າ ບັນລຸຜົນເປັນຈິງໂດຍວິທີຫຼຸດຜ່ອນຕົ້ນທຶນທາງການຄ້າ. ການຫຼຸດຜ່ອນຄ່າໃຊ້ຈ່າຍສິ້ນເປືອງໃນການນໍາເຂົ້າ ແລະ ສົ່ງອອກໂດຍຜ່ານການປັບປຸງການຂົນສົ່ງ, ການຫລຸດຂັ້ນຕອນທາງການຄ້າ ແລະ ການເຮັດໃຫ້ການແຈ້ງພາສີສະດວກງ່າຍດາຍຂຶ້ນຈະເຮັດໃຫ້ ສປປ ລາວ ສາມາດເຮັດໃຫ້ກາລະໂອກາດການສົ່ງອອກໃນພາກພື້ນອາຊີ-ປາຊີຟິກ ແລະ ທົ່ວໂລກ ບັນລຸຜົນເປັນຈິງໄດ້.

## 3.3 ການຄ້າບໍລິການ

79. **ການບໍລິການແມ່ນຕົວກໍານົດທີ່ສໍາຄັນ ຂອງຜະລິດຕະພາບລວມ ຂອງປັດໄຈການຜະລິດ.** ການບໍລິການມີບົດບາດສໍາຄັນໃນການເຄື່ອນຍ້າຍຕົວຈິງຂອງສິນຄ້າແລະປະຊາຊົນແລະການແລກປ່ຽນຂໍ້ມູນຂ່າວ ສານໂດຍຜ່ານການຂົນສົ່ງ, ໂລຊິດສະຕິກ ແລະ ການສື່ສານ. ທຸລະກິດນໍາໃຊ້ການບໍລິການທາງດ້ານກົດ ຫມາຍ, ການບັນທຶກບັນຊີ ແລະການບັນຊີ, ການປະກັນໄພ ແລະ ການໃຫ້ຄໍາປຶກສາດ້ານການຄຸ້ມຄອງ. ປະສິດທິພາບຂອງຂະແໜງການບໍລິການມີບົດບາດສໍາຄັນໃນການກໍານົດຈັງຫວະຂອງການພັດທະນາເສດຖະກິດ.

80. **ຂະແໜງບໍລິການທີ່ອ່ອນນ້ອຍເປັນສິ່ງທີ່ຈຳກັດຜະລິດຕະພາບໃນລະດັບວິສາຫະກິດ ຢູ່ສປປ ລາວ.** ບັນດາການບໍລິການມີຄວາມສຳຄັນທັງສຳລັບການປະກອບສ່ວນໂດຍກົງເຂົ້າໃນການຂະຫຍາຍຕົວ (ເຊັ່ນ: ການທ່ອງທ່ຽວ) ແລະເປັນປັດໄຈສິ້ນເຂົ້າເພື່ອຊຸກຍູ້ການແຂ່ງຂັນຂອງຂະແໜງເສດຖະກິດອື່ນໆໃຫ້ກ້າວໜ້າ, ລວມທັງກະສິກຳແລະອຸດສາຫະກຳປຸງແຕ່ງ. ການຂົນສົ່ງ, ໂລຊິດສະຕິກ, ການບໍລິການຂອງຜູ້ຊ່ຽວຊານໃນວິຊາຊີບ ແລະການບໍລິການສະໜັບສະໜູນທັງໝົດລ້ວນແຕ່ແມ່ນສິ່ງທີ່ເຮັດໃຫ້ຜະລິດຕະພາບເພີ່ມຂຶ້ນ. ມີຄວາມສຳພັນທີ່ໃກ້ຊິດລະຫວ່າງຄຸນນະພາບຂອງການບໍລິການທີ່ເປັນກະດູກສັນຫຼັງ (ການຂົນສົ່ງ ແລະ ໄຟຟ້າ) ແລະ ຜະລິດຕະພາບໃນລະດັບວິສາຫະກິດ. ບັນດາການບໍລິການແມ່ນປັດໄຈຫຼັກທີ່ສາມາດຊ່ວຍວິສາຫະກິດໃນການສ້າງມູນຄ່າເພີ່ມໃຫ້ໄດ້ຫລາຍຂື້ນ.

81. **ຂະແໜງບໍລິການຂອງ ສປປ ລາວ ມີຂະໜາດນ້ອຍທຽບກັບລະດັບການພັດທະນາເສດຖະກິດ.** ຂະແໜງບໍລິການຂອງ ສປປ ລາວ ໄດ້ຂະຫຍາຍຕົວໃນຕົວຂອງມັນເອງໃນໄລຍະ 2 ທົດສະວັດທີ່ຜ່ານມາ ແລະ ປັດຈຸບັນກໍເປັນຂະແໜງການທີ່ໃຫຍ່ທີ່ສຸດກວມເອົາ 41,7 ສ່ວນຮ້ອຍຂອງ GDP. ການບໍລິການຂອງ ສປປ ລາວ ກວມເອົາ 40,6 ສ່ວນຮ້ອຍຂອງ GDP ໃນປີ 2020. ອັນນີ້ແມ່ນສູງກວ່າກຳປູເຈຍເລັກນ້ອຍ (36,2 ສ່ວນຮ້ອຍ), ເກືອບວ່າເທົ່າກັບຫວຽດນາມ (41,6 ສ່ວນຮ້ອຍ) ແລະ ໜ້ອຍກວ່າປະເທດໄທເລັກນ້ອຍ (58,2 ສ່ວນຮ້ອຍ). ຂະແໜງການບໍລິການ, ໃນຖານະເປັນສ່ວນແບ່ງຂອງເສດຖະກິດ, ໂດຍທົ່ວໄປແລ້ວ, ຈະເພີ່ມຂຶ້ນຕາມຈັງຫວະລະດັບລາຍໄດ້ຕໍ່ຫົວຄົນ. ໃນທົ່ວໂລກ, ສປປ ລາວ ແລະ ເສດຖະ ກິດອື່ນໆໃນພາກພື້ນມີຂະແໜງການບໍລິການທີ່ມີຂະໜາດນ້ອຍທຽບກັບລະດັບການພັດທະນາເສດຖະກິດຂອງຕົນ.

82. **ການເຕີບໂຕຂອງການສົ່ງອອກການບໍລິການໃນໄລຍະຜ່ານມາແມ່ນສຸມໃສ່ໃນການບໍລິການ "ທີ່ເຄີຍມີມາແຕ່ເດີມ", ຄືການຂົນສົ່ງແລະການເດີນທາງ.** ການບໍລິການ 'ແບບເຄີຍມີແຕ່ເດີມ' ຮຽກຮ້ອງໃຫ້ຕ້ອງໃຊ້ຄົນຕົວຈິງໃນເວລາໃຫ້ບໍລິການ ແລະ ການມີປະຕິສຳພັນຫນ້າຕໍ່ໜ້າກັບຜູ້ຊື້ ແລະຜູ້ຂາຍ ແລະ ເພິ່ງພາອາໄສພື້ນຖານໂຄງລາງທີ່ເປັນວັດຖຸຫລາຍກວ່າ. ການບໍລິການການຂົນສົ່ງມີຄວາມສຳຄັນສຳລັບການເຊື່ອມຈອດ; ແນວໃດກໍ່ຕາມ, ການບໍລິການຂົນສົ່ງຂອງ ສປປ ລາວ ເປັນສ່ວນແບ່ງຂອງການສົ່ງອອກບໍລິການທັງໝົດສະເລ່ຍ 10,6 ສ່ວນຮ້ອຍ ໃນໄລຍະ 2015-2019, ເຊິ່ງໂດຍທຽບຖານກໍແມ່ນຍັງຕໍ່າ. ໃນໄລຍະດຽວກັນ ການບໍລິການການທ່ອງທ່ຽວແມ່ນມີຄ່າສະເລ່ຍເທົ່າກັບ 83,2 ສ່ວນຮ້ອຍ.

## ຮູບ 3.17 ອັດຕາການເຕີບໂຕການສົ່ງອອກບໍລິການຕໍ່ປີ, 2007-2020




*ແຫລ່ງທີ່ມາ: ໄດ້ຈາກຕົວຊີ້ວັດການພັດທະນາຂອງໂລກ;*

*ໝາຍເຫດ: ແກນນອນແມ່ນ ປີ, ສີຟ້າ-ກຳປູເຈຍ, ສີສົ້ມ-ສປປ ລາວ, ສີເທົາ-ໄທ, ສີເຫລືອງ-ຫວຽດນາມ*

83. ການຂົນສົ່ງ ແລະ ການເດີນທາງ-ທ່ອງທ່ຽວກວມເອົາຫຼາຍກວ່າ 90 ສ່ວນຮ້ອຍຂອງການສົ່ງອອກການບໍລິການ. ຮູບທີ 3.15 ສະແດງໃຫ້ເຫັນອັດຕາການເຕີບໂຕປະຈຳປີປຽບທຽບຂອງການສົ່ງອອກການບໍລິການໃນໄລຍະ 2007-2020. ການສົ່ງອອກການບໍລິການຂອງ ສປປ ລາວ ເພີ່ມຂຶ້ນຫຼາຍກວ່າ 3 ເທົ່າ ໃນໄລຍະ 2010-2019; ຢ່າງໃດກໍດີ, ສ່ວນແບ່ງຂອງການສົ່ງອອກການບໍລິການທັງໝົດໄດ້ຫຼຸດລົງຈາກ 22,6 ສ່ວນຮ້ອຍມາເປັນ 16,9 ສ່ວນຮ້ອຍ ໃນໄລຍະດຽວກັນ. ການສົ່ງອອກການບໍລິການຈາກ ສປປ ລາວ ໄດ້ຂະຫຍາຍຕົວຢ່າງວ່ອງໄວໃນປີ 2012-2013, ໄດ້ຫຼຸດລົງໃນປີ 2014 ແລະ 2016-2017 ແລະ ຕໍ່ມາໃນປີ 2018-2019 ແມ່ນໄດ້ເພີ່ມຂຶ້ນຢ່າງໄວວາ. ໃນຂະນະທີ່ຍັງບໍ່ທັນມີຂໍ້ມູນຂອງ ສປປ ລາວ ສຳລັບປີ 2020, ເນື່ອງຈາກການສົ່ງອອກບໍລິການໃນປະເທດເພື່ອນບ້ານກຳປູເຈຍ ແລະ ໄທ ຫຼຸດລົງຫຼາຍກວ່າ 60 ສ່ວນຮ້ອຍ, ມັນເປັນເລື່ອງສົມເຫດສົມຜົນທີ່ຈະສົມມຸດວ່າ ສປປ ລາວ ກໍປະສົບກັບການຫຼຸດລົງຢ່າງຫຼວງຫຼາຍເຊັ່ນກັນເນື່ອງຈາກການຈຳກັດດ້ານການເດີນທາງໃນໄລຍະພະຍາດລະບາດ.

84. **‘ການບໍລິການທີ່ທັນສະໄໝ’ ແມ່ນໄດ້ມີການຊື້ຂາຍຂ້າມຊາຍແດນໂດຍບໍ່ມີການຕິດຕໍ່ພົວພັນໜ້າຕໍ່ໜ້າ.** ຜູ້ຊື້ແລະຜູ້ຂາຍສາມາດຢູ່ໃນສະຖານທີ່ແຍກຕ່າງຫາກ. ສິ່ງເຫຼົ່ານີ້ລວມມີໂທລະຄົມມະນາຄົມແລະ ບັນດາການບໍລິການຂອງຜູ້ຊ່ຽວຊານຕາມສາຂາວິຊາຊີບຂອງຫລາຍໆຂະແໜງ: ການປະກັນໄພ, ທະນາຄານ, ທຸລະກິດ, ການໃຫ້ຄຳປຶກສາແບບທາງໄກ. ການບໍລິການທີ່ທັນສະໄໝຮຽກຮ້ອງໃຫ້ມີໄຟຟ້າທີ່ໄວ້ໃຈໄດ້, ໂທລະຄົມມະນາຄົມທີ່ດີ ແລະ ອິນເຕີເນັດໃຫ້ນັບມື້ມີຄວາມໄວສູງຂຶ້ນ. ການບໍລິການເຫຼົ່ານີ້ໄດ້ສ້າງວຽກທີ່ມີລາຍໄດ້ສູງ ແລະ ມີຜະລິດຕະພາບທີ່ສູງຂຶ້ນກວ່າເກົ່າຫລາຍ, ເຖິງແມ່ນວ່າມັນຈະສ້າງວຽກໂດຍກົງໜ້ອຍ. ການບໍລິການທີ່ທັນສະໄໝ ຍັງເປັນປັດໄຈສິ້ນເຂົ້າທີ່ຈຳເປັນໃນການພັດທະນາອຸດສາຫະກຳປຸງແຕ່ງທີ່ແຂ່ງຂັນໄດ້.

## 3.4 ການຄ້າທາງເອເລັກໂຕຣນິກ

85. **ການລະບາດຂອງພະຍາດໂຄວິດ-19 ເປັນການເລັ່ງລັດການຂະຫຍາຍຕົວຂອງການຄ້າທາງເອເລັກໂຕຣນິກໃນທົ່ວໂລກ: ການຊື້-ຂາຍສິນຄ້າ ແລະການບໍລິການໂດຍໃຊ້ອິນເຕີເນັດ.** ການຄ້າທາງເອເລັກໂຕຣນິກມີທ່າແຮງໃນການຫຼຸດຜ່ອນຕົ້ນທຶນດ້ານການຄ້າສຳລັບຜູ້ສົ່ງອອກຂອງ ສປປ ລາວ ແລະ ເປັນການຫຼຸດລາຄາສຳລັບຜູ້ບໍລິໂພກ. ການບໍລິການດ້ານ ICT ໄດ້ຂະຫຍາຍຄວາມສຳຄັນຂຶ້ນໃນເສດຖະກິດຂອງ ສປປ ລາວ; ແນວໃດກໍ່ຕາມ, ການເລີ່ມນຳໃຊ້ການຄ້າທາງເອເລັກໂຕຣນິກ ຂອງທັງຝ່າຍວິສາຫະກິດແລະຜູ້ຊົມໃຊ້ຍັງຄົງບໍ່ມີຫລາຍປານໃດຍ້ອນຄວາມດ້ອຍພັດທະນາດ້ານພື້ນຖານໂຄງລ່າງໂທລະຄົມມະນາ ຄົມແລະອັດຕາການນຳໃຊ້ທະນາຄານຢ່າງເປັນທາງການແລະບັດເຄຣດິດຍັງຕ່ຳ. ຂໍ້ຈຳກັດດ້ານການຈັດຕັ້ງທີ່ສຳຄັນລວມມີການບໍ່ມີອົງການຄຸ້ມຄອງ ທີ່ແຍກອອກຈາກຜູ້ວາງນະໂຍບາຍ, ການຂາດຂອບຂາຍການອອກໃບອະນຸຍາດ ແລະ ຂາດສະຖານະການໆແຂ່ງຂັນທີ່ສະເໝີພາບ ສຳລັບຜູ້ປະກອບການໂທລະຄົມ.

86. **ຂອບກົດໝາຍ ແລະ ລະບຽບການສຳລັບການຄ້າເອເລັກໂຕຣນິກ ຕ້ອງການໃຫ້ມີການເສີມສ້າງຄວາມເຂັ້ມແຂງ.** ລັດຖະບານໄດ້ຜ່ານກົດໝາຍວ່າດ້ວຍການປົກປ້ອງຜູ້ຊົມໃຊ້ໃນປີ 2010, ກົດໝາຍວ່າດ້ວຍໂທລະຄົມມະນາຄົມໃນປີ 2011, ກົດໝາຍວ່າດ້ວຍທຸລະກຳທາງເອເລັກໂຕຣນິກໃນປີ 2012, ກົດ ໝາຍວ່າດ້ວຍການຕ້ານ ແລະ ສະກັດກັ້ນອາຊະຍາກຳທາງລະບົບຄອມພິວເຕີ ໃນປີ 2016 ແລະ ໃນປີ 2018 ໄດ້ຮັບຮອງເອົານິຕິກຳເພື່ອສ້າງລະບົບການຊຳລະແຫ່ງຊາດສຳລັບການບໍລິການດ້ານການເງິນທາງ ດິຈິຕອນ. ຢ່າງໃດກໍ່ຕາມ, ຍັງຕ້ອງການໃຫ້ມີກົດໝາຍ ແລະ ລະບຽບການ ເພື່ອປົກປ້ອງຜູ້ຊົມໃຊ້ທີ່ເຂົ້າມາເຄື່ອນໄຫວໃນການຄ້າທາງດິຈິຕອນ ແລະ ຮັບປະກັນການປົກປ້ອງຂໍ້ມູນສ່ວນຕົວ.

### ຕາຕະລາງ 3.2 ສ່ວນແບ່ງ ຂອງການປົກຄຸມຂອງການຊົມໃຊ້ໂທລະຄົມມະນາຄົມ ແລະ ອິນເຕີເນັດ, 2018

| | |
|---|---|
| **ການຈອງໃຊ້ໂທລະສັບຕັ້ງໂຕະ** | **21,0** |
| **ການຈອງໃຊ້ໂທລະສັບມືຖື** | **51,9** |
| **ສ່ວນຮ້ອຍຄົວເຮືອນທີ່ມີຄອມພິວເຕີໃຊ້** | **13,2** |
| **ສ່ວນຮ້ອຍຄົວເຮືອນທີ່ໃຊ້ອິນເຕີເນັດ** | **24,5** |
| **ການຈອງໃຊ້ອິນເຕີເນັດຄວາມໄວສູງແບບມີສາຍ** | **0,6** |

*ແຫລ່ງທີ່ມາ: ໄດ້ຈາກອົງການໂທລະຄົມມະນາຄົມສາກົນ ITU www.itu.int/net4*

87. **ຄ່າອິນເຕີເນັດຄວາມໄວສູງຍັງຄົງແພງ. ໃນ ສປປ ລາວ, ຄ່າໃຊ້ຈ່າຍສະເລ່ຍຂອງແພັກເກດອິນເຕີເນັດຄວາມໄວສູງ(ບຣອດແບນ)ແບບໃຊ້ສາຍແມ່ນ 47,24ໂດລາ ຕໍ່ເດືອນ ແລະຄ່າໃຊ້ຈ່າຍສະເລ່ຍຕໍ່ເມກາໄບແມ່ນ 4,33ໂດລາ.** ລາຄາບຣອດແບນປະຈຳເດືອນຂອງ ສປປ ລາວ ແມ່ນທຽບກັນໄດ້ກັບປະເທດສິງກະໂປ ແລະ ອາຟຣິກາໃຕ້, ເຊິ່ງເປັນເສດຖະກິດທີ່ມີລາຍໄດ້ສູງກວ່າຫຼາຍ, ແຕ່ເຫັນວ່າລາຄາແພງກວ່າຫຼາຍເມື່ອປຽບທຽບກັບປະເທດເພື່ອນບ້ານ ຄື ກຳປູເຈຍ (32,63 ໂດລາ), ໄທ (23,82 ໂດລາ) ແລະ ຫວຽດນາມ (11,23 ໂດລາ). ໃນປີ 2020, ການຊົມໃຊ້ຊຸດຂໍ້ມູນມືຖື ແລະ ສຽງ ມີຄ່າໃຊ້ຈ່າຍສູງ ກວມ 9,4 ສ່ວນຮ້ອຍຂອງລວມຍອດລາຍໄດ້ແຫ່ງຊາດ (GNI).

88. **ສປປ ລາວ ມີອັນດັບທາງດ້ານເຕັກໂນໂລຊີຂໍ້ມູນຂ່າວສານຕ່ຳ.** ສປປ ລາວ ມີຄະແນນຕ່ຳກວ່າຫລາຍສຳລັບທຸລະກິດ ແລະ ການຄ້າທີ່ໃຊ້ສື່ດິຈິຕອນ ແລະ ໃນໄລຍະ 2017 ຫາ 2020 ໄດ້ຕົກໄປຢູ່ຂ້າງຫຼັງ ເມື່ອທຽບກັບໄທ, ຫວຽດນາມ, ຈີນ ແລະ ອິນໂດເນເຊຍ (ເບິ່ງຮູບ 3.16).

## ຮູບ 3.18 ການຈັດລະດັບເຕັກໂນໂລຊີຂໍ້ມູນຂ່າວສານຢູ່ໃນບາງປະເທດໃນອາຊີ ທີ່ໄດ້ເລືອກມາ, 2017-2020




*ແຫຼ່ງທີ່ມາ: ໄດ້ມາຈາກອົງການ UNCTAD B2C ດັດຊະນີການຄ້າທາງເອເລັກໂຕຣນິກ 2020, ແລະ ການຈັດລະດັບການພັດທະນາຂອງອົງການ ITC 2017, ITU*

*ໝາຍເຫດ: ສີສົ້ມ ແມ່ນ ການຄ້າລະຫວ່າງທຸລະກິດກັບຜູ້ຊົມໃຊ້ (B2C) -2017, ສີເທົາ: (B2C) -2019, ສີເຫລືອງ: (B2C) -2020, ສີຟ້າ: ສະຫະພາບໂທລະຄົມມະນາຄົມສາກົນ ITU*

*ແກນນອນແຕ່ຊ້າຍໄປຂວາແມ່ນບັນດາປະເທດ: ສິງກະໂປ, ມາເລເຊຍ, ໄທ, ຈີນ, ຫວຽດນາມ, ຟີລິບປິນ, ອິນໂດເນເຊຍ, ກຳປູເຈຍ, ສປປ ລາວ, ມຽນມາ*

- ການປະເມີນຄວາມພ້ອມຂອງການຄ້າທາງເອເລັກໂຕຣນິກ & ການສ້າງຍຸດທະສາດ
- ພື້ນຖານໂຄງລ່າງ & ການບໍລິການດ້ານ ໄອຊີທີ ICT
- ໂລຊິດສະຕິການຄ້າ & ການອຳນວຍຄວາມສະດວກດ້ານການຄ້າ
- ທາງແກ້ໃນການຊຳລະ
- ຂອບຂາຍດ້ານກົດໝາຍ ແລະ ລະບຽບການ
- ການພັດທະນາທັກສະດ້ານການຄ້າທາງເອເລັກໂຕຣນິກ
- ການເຂົ້າເຖິງແຫລ່ງເງິນທຶນ

89. **ການປະເມີນຄວາມພ້ອມດ້ານການຄ້າທາງເອເລັກໂຕຣນິກໂດຍອົງການ UNCTAD ກວມໄປໃນທົ່ວ 7 ຂົງເຂດນະໂຍບາຍ (ເບິ່ງກອງເນື້ອຄວາມ).** ການປະເມີນຄວາມພ້ອມຂອງການຄ້າທາງເອເລັກໂຕຣນິກແບບໄວຂອງ UNCTAD ປີ 2018 ໄດ້ກຳນົດຂໍ້ສະເໜີແນະບູລິມະສິດ, ໃນນີ້ລວມມີການແກ້ໄຂການຈ່າຍເງິນ, ການສ້າງຈິດສຳນຶກກ່ຽວກັບການຄ້າທາງເອເລັກໂຕຣນິກ, ການພັດທະນາວິໄສທັດແຫ່ງຊາດຮ່ວມກັນ ແລະຂອບການປະສານງານສຳລັບການຄ້າທາງເອເລັກໂທຣນິກ, ນຳໃຊ້ກົດລະບຽບຈຳກັດຫນ້ອຍກວ່າໃນຂະແໜງການທະນາຄານແລະໂທລະຄົມ ເພື່ອສະໜອງການບໍລິການການຄ້າທາງເອເລັກໂຕຣນິກ ທີ່ດີກວ່າແລະລາຄາຖືກກວ່າ. ຂໍ້ຈຳກັດອື່ນໆລວມມີການຂາດໂຄງລ່າງ ICT ໃນຫຼາຍເຂດຊົນນະບົດ, ການຂາດການບໍລິການຈັດສົ່ງຮອດຂອດສຸດທ້າຍແຕສາງຫາຜູ້ຊົມໃຊ້, ການຂາດແຄນທັກສະ ດ້ານ ICT ແລະ ດ້ານດີຈິຕອນອື່ນໆ ແລະຄວາມຮຽກຮ້ອງຕ້ອງການສຳລັບການຈ່າຍເງິນຂອງການຄ້າທາງເອເລັກໂຕຣນິກ ສ່ວນໃຫຍ່ຈະເປັນເງິນສົດໃນເວລາສົ່ງມອບສິນຄ້າ.

90. **ເວທີການຄ້າໄດ້ມີການເປີດຕົວພິເສດສິນຄ້າຂອງ ສປປ ລາວ.** ດ້ວຍການໃຫ້ທຶນຈາກທະນາຄານພັດທະນາອາຊີ, MOIC ແລະ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດ ຂອງ LNCCI ໄດ້ເປີດເວັບໄຊອອນລາຍ, Plaosme, ເພື່ອສົ່ງເສີມ SMEs ແລະປັບປຸງການເຂົ້າເຖິງຕະຫຼາດອາຊຽນ. ບໍລິສັດເອກະຊົນ (Barterfli Holdings) ເປັນເຈົ້າຂອງແລະດຳເນີນການເວັບໄຊດັ່ງກາວ. ຜະລິດຕະພັນຫຼັກຂອງຮ້ານອອນລາຍແມ່ນອາໄຫຼ, ກະເປົາ, ເຄື່ອງນຸ່ງ, ແລະອຸປະກອນເຕັກໂນໂລຊີຂໍ້ມູນຂ່າວສານ. ບໍລິສັດອະນຸຍາດໃຫ້ຊຳລະອອນລາຍ (BCEL One) ແລະການໂອນເງິນລະຫວ່າງບັນຊີຕໍ່ບັນຊີຜ່ານທະນາຄານ. ສິ່ງທ້າທາຍທີ່ສຳຄັນທີ່ Plaosme ຜະເຊີນໜ້າລວມມີການຊັກຊ້າໃນການການຈັດສົ່ງ, ການຂາດຂໍ້ຜູກພັນການຊື້ຢ່າງເປັນທາງການແລະຄວາມທ້າທາຍຂອງການຈ່າຍເງິນ (ນັ້ນຄື, ການບໍ່ມີບັນຊີທະນາຄານ). UNCTAD (2018) ໄດ້ໃຈໃຫ້ເຫັນວ່າທາງແກ້ຂອງການຊຳລະເປັນຄໍແກ້ວທີ່ສຳຄັນທີ່ຂັດຂວາງການຂະຫຍາຍຕົວຂອງການຄ້າທາງເອເລັກໂຕຣນິກໃນ ສປປ ລາວ.

91. **ການພັດທະນາການບໍລິການດ້ານການເງິນດິຈິຕອນ (DFS) ເປັນສິ່ງຈຳເປັນເພື່ອເພີ່ມທະວີການຄ້າທາງເອເລັກໂຕຣນິກ.** DFS ມີກົນໄກເພື່ອໃຫ້ການຊຳລະມີຄວາມປອດໄພ, ເຊື່ອຖືໄດ້, ມີປະສິດທິພາບ, ແລະສາມາດຈ່າຍໄດ້. ຢູ່ ສປປ

ລາວ, ທະນາຄານແຫ່ງ ສປປ ລາວ, ໃນຖານະທີ່ເປັນອົງການນຳໜ້າພາທາງທີ່ຮັບຜິດຊອບໃນການປະສານງານ DFS, ໄດ້ອອກຮ່າງຄຳແນະນຳຂອງ DFS ໃນປີ 2015 ສຳລັບທະນາຄານ ແລະ ຜູ້ໃຫ້ບໍລິການ DFS ທີ່ບໍ່ແມ່ນທະນາຄານ. ທະນາຄານການຄ້າຕ່າງປະເທດມະຫາຊົນ (BCEL) ໃຫ້ບໍລິການທະນາຄານທາງອິນເຕີເນັດ ແລະມີແອັບພລິເຄຊັນບົນມືຖືໃຫ້ນຳໃຊ້; ຢ່າງໃດກໍ່ດີ, ອັນນີ້ສາມາດໃຊ້ໄດ້ກັບລູກຄ້າທີ່ມີບັນຊີທະນາຄານເທົ່ານັ້ນ.

92. **ສປປ ລາວ ມີຄວາມມຸ່ງໝັ້ນໃນການແກ້ໄຂບັນຫາດ້ານລະບຽບການທີ່ຄົງຄ້າງ ໂດຍຜ່ານການມີພັນທະຂອງຕົນໃນອາຊຽນ ແລະ WTO.** ໃນເດືອນ ມິຖຸນາ ປີ 2021, ສປປ ລາວ ໄດ້ເຂົ້າຮ່ວມສັນຍາເຕັກໂນໂລຊີຂໍ້ມູນຂ່າວສານ (ITA) ປີ 1996 ຂອງອົງການການຄ້າໂລກ (WTO) ແລະ ສະບັບຂະຫຍາຍ ITA ປີ 2015. ສປປ ລາວ ໄດ້ຍື່ນຮ່າງຕາຕະລາງການລົບລ້າງອັດຕາພາສີສຳລັບຜະລິດຕະພັນເຕັກໂນໂລຊີຊັ້ນສູງທີ່ ທັງສອງສັນຍາໄດ້ຄອບຄຸມເອົາໄວ້. ITA ກວມເອົາສະມາຊິກ WTO 82 ປະເທດ ເຊິ່ງກວມ ເອົາ 97 ສ່ວນຮ້ອຍຂອງການຄ້າໂລກໃນດ້ານຜະລິດຕະພັນເຕັກໂນໂລຊີຂໍ້ມູນຂ່າວສານ. ສປປ ລາວ ເປັນປະເທດ LDC ທຳອິດທີ່ໄດ້ເຂົ້າເປັນສະມາຊິກຂອງ ITA ແລະ ຂອງ ITA ສະບັບຂະຫຍາຍ ແລະຍັງມີການສົນທະນາຢ່າງຕັ້ງໜ້າກ່ຽວກັບຂໍ້ລິເລີ່ມຖະແຫຼງການຮ່ວມຂອງ WTO ກ່ຽວກັບການຄ້າທາງເອເລັກໂຕຣນິກ.

93. **ສປປ ລາວ ກຳລັງເຮັດວຽກຢູ່ໃນຂອບ e-ASEAN ເພື່ອພັດທະນານິຕິກຳພາຍໃນທີ່ເວົ້າເຖິງການປົກປ້ອງຜູ້ຊົມໃຊ້, ຄວາມເປັນສ່ວນຕົວ ແລະ ລາຍເຊັນເອເລັກໂຕຣນິກ.** ແຜນງານ ປະຊາຄົມເສດຖະກິດອາຊຽນ AEC Blueprint 2025 ໄດ້ຍົກໃຫ້ເຫັນຄວາມສຳຄັນທີ່ຂາດບໍ່ໄດ້ຂອງການຄ້າທາງເອເລັກໂຕຣນິກໃນທົ່ວໂລກ ແລະ ໃຫ້ຂໍ້ສັງເກດວ່າມັນໄດ້ຫຼຸດຜ່ອນສິ່ງກີດຂວາງຕໍ່ການເຂົ້າມາສູ່ວົງການທຸລະກິດ ແລະ ຄ່າໃຊ້ຈ່າຍສິ້ນເປືອງໃນການດຳເນີນງານ ແລະ ສາມາດອຳນວຍຄວາມສະດວກໃຫ້ແກ່ການລົງທຶນຈາກຕ່າງປະເທດ. ແຜນງານນີ້ທີ່ສ້າງບົນພື້ນຖານສັນຍາຂອບ ຂອງອີ-ອາຊຽນ (e-ASEAN Framework Agreement) ໄດ້ຖືກຮັບຮອງເອົາໃນປີ 2000 ໂດຍມີເປົ້າໝາຍທີ່ຈະສ້າງສັນຍາອາຊຽນວ່າດ້ວຍການຄ້າທາງເອເລັກໂຕຣນິກ E-Commerce ເພື່ອອຳນວຍຄວາມສະດວກໃຫ້ແກ່ການເຮັດທຸລະກຳຂ້າມຊາຍແດນພາຍໃນອາຊຽນ. ການພັດທະນາການຄ້າທາງເອເລັກໂຕຣນິກແມ່ນໜຶ່ງໃນຈຸດມຸ່ງໝາຍຍຸດທະສາດຂອງກະ ຊວງໄປສະນີ ແລະ ໂທລະຄົມມະນາຄົມ ໄລຍະ 2016-2025. ສປປ ລາວ ມີຄວາມມຸ່ງໝາຍໄປເຖິງການສ້າງກົດໝາຍ ແລະ ລະບຽບການດ້ານການຄ້າທາງເອເລັກໂຕຣນິກໃຫ້ຄົບຖ້ວນພາຍໃນປີ 2025. ການສຳນຶກໄດ້ເຖິງເປົ້າໝາຍດັ່ງກ່າວຮຽກຮ້ອງໃຫ້ລັດຖະບານລາວ ພັດທະນານະໂຍບາຍການຄ້າທາງເອເລັກໂຕຣນິກ ແລະ ຂອບລະບຽບການ ເພື່ອຮັບປະກັນໃຫ້ການຄ້າທາງເອເລັກໂຕຣນິກມີປະສິດທິພາບ, ມີຄວາມປອດໄພ ແລະ ຄວາມຮັບປະກັນ. ການຄ້າທາງເອເລັກໂຕຣນິກໄດ້ເຕີບໂຕຢ່າງໄວວາ, ໂດຍສະ ເພາະນັບຕັ້ງແຕ່ການແຜ່ລະບາດຂອງພະຍາດໂຄວິດ-19 (COVID-19); ຢ່າງໃດກໍຕາມ, ໃນກໍລະນີທີ່ບໍ່ມີນິຕິກຳທີ່ຄົບຖ້ວນສົມບູນ, ອັນນີ້ກໍຖືວ່າຍັງແມ່ນແບບບໍ່ເປັນທາງການ. ມັນຮຽກຮ້ອງໃຫ້ມີລະບຽບກົດໝາຍເພີ່ມເຕີມເພື່ອແກ້ໄຂການປົກປ້ອງຂໍ້ມູນ ແລະອາຊະຍາກຳທາງລະບົບຄອມພິວເຕີ.

94. ສປປ ລາວ ຄວນເຂົ້າຮ່ວມ ສົນທິສັນຍາວ່າດ້ວຍການອຳນວຍຄວາມສະດວກການຄ້າລະຫວ່າງປະເທດແບບບໍ່ໃຊ້ເອກະສານ ຂອງເອເຊຍ ປາຊີຟິກ. ສົນທິສັນຍາດັ່ງກ່າວແມ່ນມີຫຼັກການພື້ນຖານທີ່ຄືກັນກັບ ຮ່າງກົດໝາຍ UNCITRAL ວ່າດ້ວຍການຄ້າ ເອເລັກໂຕຣນິກ ແລະ ໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ ທາງເອເລັກໂຕຣນິກ ກໍ່ສາມາດຊ່ວຍການແລກປ່ຽນຂໍ້ມູນຂ້າມແດນ ແລະ ສິ່ງເຫຼົ່ານີ້ແມ່ນໄດ້ລະບຸໃນ ATIGA Form D ແຕ່ເດືອນ ທັນວາ ປີ 2019, ເຖິງຢ່າງໃດກໍ່ຕາມ ກ່ອນທີ່ຈະເລີ່ມນຳໃຊ້ ລະບົບ paperless ຈຳຕ້ອງໄດ້ມີການກະກຽມເພີ່ມເຕີມ ຕໍ່ຢ່າງ ເຖິງແມ່ນວ່າ ປັດຈຸບັນຜູ້ນຳເຂົ້າ ແລະ ສົ່ງອອກສາມາດແຈ້ງເອກະສານແບບ ອອນໄລ, ແຕ່ຍັງມີລະບຽບທີ່ບັງຄັບ ໃຫ້ສົ່ງເອກະສານ ທີ່ມີລາຍເຊັນເພື່ອກວດກາ ແລະ ເກັບກຳໄວ້ໃນຖານຂໍ້ມູນ. ການປະເມີນຄວາມພ້ອມດ້ານ ລະບົບ paperless ທີ່ດຳເນີນໂດຍ ESCAP ໃນປີ 2022 ໄດ້ສະເໜີໜ້າວຽກທີ່ເປັນບູລິມະສິດຈຳນວນໜຶ່ງເຊັ່ນ: ຕ້ອງຮັບປະກັນວ່າ ເງື່ອນໄຂການດຳເນີນທຸລະກຳທາງເອເລັກໂຕຣນິກ ແລະ ການຮັບເອົາລາຍເຊັນ ເອເລັກໂຕຣນິກ ແມ່ນໄດ້ຕາມມາດຕາຖານສາກົນ, ສາມາດເຂົ້າເຖິງຂໍ້ມູນ ທີ່ຈຳເປັນ ລວມທັງຂໍ້ມູນສ່ວນຕົວ ລະ ຕ້ອງຮັບປະກັນການຈັດຕັ້ງປະຕິບັດບັນດານິຕິກຳທີ່ກ່ຽວຂ້ອງຢ່າງຄົບຖ້ວນ. ປັດຈຸບັນ ສປປ ລາວພວມດຳເນີນປັບປຸງ ມາດຕາຖານດ້ານຂໍ້ມູນ, ການເຊື່ອມຕໍ່ ແລະ ຄວາມປອດໄພຂອງຂໍ້ມູນ. ບົດປະເມີນຂອງ ESCAP ຍັງເຫັນວ່າ ຄວາມເຂົ້າໃຈຕໍ່ ລະບົບ paperless ແມ່ນຍັງຈຳກັດຫຼາຍ ແລະ ຈຳເປັນຕ້ອງມີແຜນຍົກລະດັບຄວາມສາມາດຂອງພາກລັດ ແລະ ທຸລະກິດ ທີ່ກ່ຽວຂ້ອງອີກດ້ວຍ.

## 3.5 ບົດບາດຍິງ-ຊາຍ ແລະ ການຄ້າ

95. **ການເພີ່ມການຄ້າໃນຖານະເປັນສ່ວນແບ່ງຂອງ GDP ແມ່ນຕິດພັນກັບການປັບປຸງໂອກາດຂອງແມ່ຍິງ.** ການປະຕິຮູບນະໂຍບາຍການຄ້າ ແລະ ການອຳນວຍຄວາມສະດວກດ້ານການຄ້າເປັນການຫຼຸດຜ່ອນຕົ້ນທຶນດ້ານການຄ້າ, ເປີດກວ້າງກາລະໂອກາດທາງການຕະຫລາດ, ຊຸກຍູ້ສົ່ງເສີມໃຫ້ມີຄວາມສາມາດແຂ່ງຂັນເພີ່ມຂຶ້ນ. ການເພີ່ມຄວາມສາມາດໃນການແຂ່ງຂັນສ້າງສິ່ງກະຕຸກຊຸກຍູ້ໃນທາງບວກສຳລັບບັນດາເສດຖະກິດ ແລະທຸລະກິດເພື່ອຫຼຸດຜ່ອນການຈຳແນກທາງເພດ. ນະໂຍບາຍແລະການປະຕິບັດທີ່ຈຳແນກຕໍ່ເຄິ່ງໜຶ່ງຂອງປະຊາກອນໝາຍເຖິງຂໍ້ຈຳກັດທີ່ມີໄນຍະສຳຄັນຕໍ່ການພັດທະນາ. ນອກຈາກນັ້ນ, ວິສາຫະກິດສົ່ງອອກ, ວິສາຫະກິດທີ່ເຊື່ອມຕໍ່ກັບລະບົບຕ່ອງໂສ້ມູນຄ່າຂອງໂລກ (GVCs), ມີການຈ້າງງານຜູ້ຍິງຫຼາຍກວ່າວິສາຫະກິດທີ່ຮັບໃຊ້ຕະຫຼາດພາຍໃນ. ຄວາມແຕກໂຕນອັນໃຫຍ່ທາງດ້ານເພດໃນການມີສ່ວນຮ່ວມທາງເສດຖະກິດຖືເປັນການຈັດສັນຊັບພະຍາກອນທີ່ຜິດພາດ ແລະ ເປັນການຫຼຸດພ່ອນສະຫວັນຂອງ

11. Cuberes David ແລະ Marc Teignier (2017). ຊ່ອງວ່າງດ້ານບົດບາດຍິງ-ຊາຍໃນການປະກອບກິດຈະການ ແລະ ຜົນກະທົບທາງດ້ານເສດຖະກິດມະຫາພາກໃນອາເມຣິກາລາຕິນ, ຊຸດເອກະສານຄົ້ນຄວ້າເກັບກຳຂໍ້ມູນ ຂອງ IDB ເລກທີ IDP-WP-848.

ແຮງງານລົງ, ເຊິ່ງເປັນການຫຼຸດຜ່ອນການເຕີບໂຕຂອງເສດຖະກິດ ແລະ ສົ່ງຜົນໃຫ້ລະດັບລາຍໄດ້ຕໍ່ຫົວຄົນຕໍ່າລົງ[11]. ນອກນີ້, ການເພີ່ມທະວີການມີສ່ວນຮ່ວມທາງດ້ານເສດຖະກິດຂອງແມ່ຍິງ ແມ່ນການເຮັດໃຫ້ເສດຖະກິດເພີ່ມການເຕີບໂຕຂຶ້ນໃນໄລຍະຍາວ ເນື່ອງຈາກວ່າແມ່ຍິງມີການລົງທຶນເຂົ້າໃນການສຶກສາຂອງລູກຫຼານຂອງເຂົາເຈົ້າຫຼາຍກວ່າ ເຊິ່ງເປັນການເພີ່ມທຶນມະນຸດ.

96. **ການເພີ່ມການຄ້າຂຶ້ນເປັນການເຮັດໃຫ້ຊີວິດຂອງແມ່ຍິງດີຂຶ້ນ ເພາະຈະເຮັດໃຫ້ມີວຽກເຮັດງານທຳທີ່ເປັນທາງການຫລາຍຂຶ້ນ ພ້ອມກັບຜົນປະໂຫຍດ ແລະ ຄວາມພົ້ນຄົງໃນດ້ານວຽກງານທີ່ດີຂຶ້ນ.** ນະໂຍບາຍການຄ້າມັກຈະເຮັດໃຫ້ອັດຕາພາສີສູງຂຶ້ນສຳລັບຜະລິດຕະພັນສິນຄ້າທີ່ແມ່ຍິງມີການບໍລິໂພກເປັນການສະເພາະ. ໃນກໍລະນີດັ່ງກ່າວ, ການຫຼຸດຜ່ອນຫຼືລຶບລ້າງອັດຕາພາສີນຳເຂົ້າສາມາດນຳໄປສູ່ການເພີ່ມຂຶ້ນຂອງລາຍໄດ້ທີ່ແທ້ຈິງຂອງຄົວເຮືອນທີ່ ແມ່ຍິງເປັນຫົວໜ້າຄອບຄົວທຽບກັບຄົວເຮືອນທີ່ຜູ້ຊາຍເປັນຫົວໜ້າ. ມາດຕະການທີ່ບໍ່ແມ່ນອັດຕາພາສີເປັນການຍົກສູງຕົ້ນທຶນທາງການຄ້າສຳລັບຜູ້ຜະລິດທັງຫມົດ; ແນວໃດກໍ່ ຕາມ, ເມື່ອສິ່ງເຫລົ່ານີ້ເປັນການຈຳແນກ ແລະ ບໍ່ໂປ່ງໃສ, ມັນອາດຈະສົ່ງຜົນກະທົບຢ່າງບໍ່ສົມສ່ວນຕໍ່ທຸລະກິດທີ່ຜູ້ຍິງເປັນເຈົ້າຂອງ ແລະ ຊາວຄ້າຂາຍທັງຫລາຍ. ແມ່ຍິງທີ່ເຮັດການຄ້າຂ້າມຊາຍແດນມັກຈະມີຄວາມຮັບຜິດຊອບໃນວຽກຄອບຄົວເຮືອນຊານ ແລະ ການລ້ຽງດູລູກ, ການເຂົ້າເຖິງແຫລ່ງເງິນທຶນທີ່ຈຳກັດ ແລະ ມີຄວາມຮູ້ຈຳກັດດ້ານລະບຽບວິທີປະຕິບັດທາງພາສີ; ປັດໄຈທັງໝົດເຫລົ່ານີ້ເຮັດໃຫ້ພວກເຂົາເຈົ້າມີຄວາມບອບບາງຈາກຄວາມບໍ່ມີປະສິດທິພາບຂອງດ່ານຊາຍແດນ.

97. **ສປປ ລາວ ມີ "ວິສາຫະກິດທີ່ບໍ່ໄດ້ຂຶ້ນທະບຽນ" ທີ່ຜູ້ຍິງເປັນເຈົ້າຂອງ ຫຼາຍກວ່າ 70 ສ່ວນຮ້ອຍ.** ອັນນີ້ໄດ້ຮັບການຢັ້ງຢືນໂດຍການສຳຫຼວດຂອງທະນາຄານໂລກ 2019; ຫຼາຍກວ່າ 77 ສ່ວນຮ້ອຍຂອງທຸລະກິດຍິງເປັນເຈົ້າຂອງແມ່ນສຸມໃສ່ໃນການຂາຍອາຫານ ຫຼື ສິນຄ້າເຄື່ອງແຫ້ງ. ໃນລາວ, ແມ່ຍິງໄດ້ດຳ ເນີນທຸລະກິດທີ່ບໍ່ໄດ້ຂຶ້ນທະບຽນ ຍ້ອນມີຄວາມຈຳເປັນໃນການຫາລາຍໄດ້ສຳຮອງ ຫຼື ລາຍໄດ້ເສີມໃນກໍລະນີສຸດທ້າຍ. ແມ່ຍິງໃນຂະແໜງການທຸລະກິດທີ່ໄດ້ຂຶ້ນທະບຽນສ່ວນຫຼາຍແມ່ນເຮັດທຸລະກິດທີ່ຄອບຄົວຕົນເອງເປັນເຈົ້າຂອງ. ຂັ້ນຕອນການຂຶ້ນທະບຽນທຸລະກິດຂອງ ສປປ ລາວ ແມ່ນປະຕິບັດຄືກັນຕໍ່ເພດຍິງແລະຊາຍ; ຢ່າງໃດກໍ່ຕາມ, ສິ່ງເຫລົ່ານີ້ມີຜົນກະທົບຜູ້ຊາຍແລະແມ່ຍິງແຕກຕ່າງກັນ. ຄ່າໃຊ້ຈ່າຍຄົງທີ່ຂອງການຂຶ້ນທະບຽນເປັນອຸປະສັກໃຫຍ່ກວ່າສຳລັບວິສາຫະກິດຂະໜາດນ້ອຍທີ່ແມ່ຍິງເປັນເຈົ້າຂອງ ແລະດຳເນີນງານ ເຊິ່ງຍິ່ງກວ່ານັ້ນແມ່ນມີການລົງທຶນຫນ້ອຍກວ່າ. ການຫຼຸດຜ່ອນຄ່າໃຊ້ຈ່າຍໃນການຂຶ້ນທະບຽນທຸລະກິດຈະສົ່ງຜົນປະໂຫຍດຢ່າງບໍ່ສົມສ່ວນຕໍ່ກັບທຸລະກິດ ທີ່ແມ່ຍິງເປັນເຈົ້າຂອງ. ການຈັດຕັ້ງປະຕິບັດຂັ້ນຕອນການແຈ້ງພາສີທີ່ໂປ່ງໃສ ແລະ ຄາດຄະເນໄດ້ຈະຫຼຸດຕົ້ນທຶນຄ່າໃຊ້ຈ່າຍທາງການຄ້າ ແລະ ເປັນຜົນປະໂຫຍດຕໍ່ຊາວຄ້າຂາຍຂ້າມແດນຂະໜາດນ້ອຍ.

98. **ສປປ ລາວ ມີຜົນການປະຕິບັດງານທີ່ດີເມື່ອສົມທຽບກັບປະເທດເພື່ອນມິດຕາມບົດລາຍງານເລື່ອງແມ່ຍິງ, ທຸລະກິດ ແລະ ກົດໝາຍ.** ດັດຊະນີ ຂອງ ສປປ ລາວ ຢູ່ທີ່ 88,1 ໃນປີ 2020 ແມ່ນລື່ນກາຍທັງໄທ ແລະ ຫວຽດນາມ. ສປປ ລາວ ສະໜັບສະໜູນຄວາມກ້າວໜ້າຂອງແມ່ຍິງ ແລະ ການສົ່ງເສີມຄວາມສະເໝີພາບລະຫວ່າງຍິງ-ຊາຍ. ໃນປີ 1981, ໄດ້ຮັບຮອງເອົາສົນທິສັນຍາວ່າດ້ວຍການລຶບລ້າງທຸກຮູບການຈຳແນກຕໍ່ແມ່ຍິງ (CEDAW) ແລະ ຫວ່າງມໍ່ໆມານີ້ ສປປ ລາວ ໄດ້ຈັດຕັ້ງປະຕິບັດຍຸດທະສາດແຫ່ງຊາດກ່ຽວກັບຄວາມສະເໝີພາບລະຫວ່າງຍິງ-ຊາຍ (2016-2025).

99. **ບໍລິສັດທີ່ແມ່ຍິງເປັນຜູ້ບໍລິຫານແມ່ນກະຈຸກຕົວຢູ່ໃນຕະຫຼາດພາຍໃນເປັນຕົ້ນຕໍ.** ປະມານໜຶ່ງສ່ວນສາມຂອງວິສາຫະກິດທັງໝົດ ທີ່ແມ່ຍິງເປັນເຈົ້າຂອງ ໄດ້ຂາຍສິນຄ້າໄປຍັງຕະຫຼາດສົ່ງອອກ (ກຳນົດເປັນການສົ່ງອອກເຊິ່ງກວມເອົາຍອດຂາຍທັງໝົດ 10 ສ່ວນຮ້ອຍ ຫຼືຫຼາຍກວ່ານັ້ນ). ສຳລັບວິສາຫະກິດທີ່ມີຜູ້ຈັດການຂັ້ນສູງເປັນແມ່ຍິງ, ຕົວເລກນີ້ແມ່ນເພີ່ມຂຶ້ນປະມານເຄິ່ງຫນຶ່ງຂອງວິສາຫະກິດທັງຫມົດ. ວິສາຫະກິດທີ່ນຳພາໂດຍແມ່ຍິງມີຂະຫນາດນ້ອຍກວ່າ, ມີຜະລິດຕະພາບຕໍ່າກວ່າ, ມີການນຳໃຊ້ ICT ແບບຈຳກັດ ແລະ ຂາດຂໍ້ມູນກ່ຽວກັບຄວາມຕ້ອງການ ຂອງຕະຫຼາດຕ່າງປະເທດ ແລະການກຳນົດຕຳແໜ່ງທີ່ຕັ້ງ ຂອງຕົນໃນຕ່ອງໂສ້ມູນຄ່າ.

100. **ການຄ້າຂ້າມຊາຍແດນຂະໜາດນ້ອຍ (SSCBT) ມີ ທ່າແຮງສຳລັບການສ້າງລາຍໄດ້ ແລະ ການສ້າງຄວາມເຂັ້ມແຂງທາງດ້ານເສດຖະກິດສຳລັບແມ່ຍິງ.** ອັນນີ້ແມ່ນໄດ້ຮັບການຢືນຢັນໂດຍການຄົ້ນພົບຂອງການສຳຫຼວດ SSCBT ທີ່ຜ່ານມາຢູ່ ສປປ ລາວ ແລະ ກຳປູເຈຍ[12]. ແມ່ຍິງເຂົ້າຮ່ວມໃນ SSCBT ໃນອັດສ່ວນທີ່ຂ້ອນຂ້າງໜ້ອຍທຽບໃສ່ກັບກິດຈະກຳອື່ນໆ (ແລະຕໍ່າກວ່າການສຳຫຼວດທີ່ຄ້າຍຄືກັນໃນອາຟຣິກາແຖວໃຕ້ທະເລຊາຍຊາຮາຣາລົງໄປ) ອາດຈະເປັນເຫດມາຈາກຂໍ້ຈຳກັດທີ່ມີຜົນບັງຄັບເຊິ່ງກະທົບຕໍ່ແມ່ ຍິງຫຼາຍກວ່າຜູ້ຊາຍ. ປົກກະຕິແລ້ວແມ່ຄ້າຍອຍຕາມຊາຍແດນ SSCBTs ແມ່ນຄາດວ່າຈະໃຊ້ເວລາໃນການເຮັດວຽກເຮືອນໃນແຕ່ລະວັນ ແລະການດູແລເດັກຫຼາຍກວ່າຜູ້ຊາຍ. ອັນນີ້ອາດຈະຂັດຂວາງບໍ່ໃຫ້ແມ່ຍິງກາຍເປັນຊາວຄ້າຂ້າມຊາຍແດນຍ້ອນເວລາການແຈ້ງພາສີຢູ່ດ່ານຊາຍແດນທີ່ບໍ່ສາມາດຄາດເດົາໄດ້. ແມ່ຍິງມີຄວາມໜ້າຈະເປັນໄດ້ໜ້ອຍກວ່າທີ່ຈະພະຍາຍາມ ແລະເຈລະຈາກ່ຽວກັບຄ່າທຳນຽມ ແລະ ພາສີອາກອນຢູ່ຊາຍແດນ. ສິ່ງນີ້ແມ່ນສອດຄ່ອງກັບທີ່ວ່າແມ່ຍິງໃຫ້ບຸລິມະສິດກັບການໃຊ້ເວລາຢູ່ຊາຍແດນໃຫ້ໜ້ອຍສຸດ; ຢ່າງໃດກໍ່ຕາມ, ມັນກໍຍັງສົ່ງຜົນໃຫ້ແມ່ຍິງມີການຈ່າຍເງິນຄ່າທຳນຽມແລະພາສີອາກອນ[13]. ທີ່ສູງກວ່າ ຫຼາຍກວ່າຜູ້ຊາຍສອງເທົ່າ.

---

12. ການສຳພາດແບບເຈາະເລິກຢູ່ດ່ານສາກົນວັງເຕົ່າ 48 ເທື່ອ. ວິທີວິທະຍາແລະການຄົ້ນພົບໄດ້ມີການລາຍງານຢູ່ໃນ Seror Marlon, Richard Record ແລະ Julian Clarke, (2017). Glass Barriers: ຂໍ້ຈຳກັດຕໍ່ການຄ້າຂ້າມຊາຍແດນຂະໜາດນ້ອຍຂອງແມ່ຍິງໃນກຳປູເຈຍ ແລະ ສປປ ລາວ, ທະນາຄານໂລກ, ເອກະສານຄົ້ນຄວ້ານະໂຍບາຍ 8249.
13. ເລື່ອງດຽວກັນກັບທີ່ອ້າງອີງໝາຍເລກທີ 7 ຜ່ານມາ. ໂດຍສະເລ່ຍແລ້ວ, ການຊຳລະພາສີອາກອນຢູ່ດ່ານວັງເຕົ່າແມ່ນເກີນ 50 ສ່ວນຮ້ອຍຂອງຜົນກຳໄລລວມ.

101. **ແມ່ຄ້ານ້ອຍຕາມຊາຍແດນ SSCBT ຜະເຊີນກັບຂໍ້ຈຳກັດດ້ານເວລາ ແລະ ອາກອນທີ່ລຳອຽງຕໍ່ເພດຍິງຢູ່ຊາຍແດນ ຄວນໄດ້ຮັບການແກ້ໄຂໂດຍໃຫ້ມີຄວາມໂປ່ງໃສເພີ່ມຂຶ້ນ ແລະ ດ້ວຍລະບົບແຈ້ງເສຍພາສີປະຕູດຽວ.** ການຈຳແນກ ທີ່ "ເບິ່ງບໍ່ເຫັນ" ນີ້ແມ່ນມາຈາກຂັ້ນຕອນການຜ່ານດ່ານຊາຍແດນ ແລະ ຫຼັກການປະຕິບັດໜ້າທີ່ຂອງເຈົ້າໜ້າທີ່ດ່ານໜ້າປະຈຳຢູ່ຊາຍແດນ. ຊາວຄ້າຂາຍຍ່ອຍຕາມຊາຍແດນ SSCBT ຫຼາຍຄົນບໍ່ຮູ້ອັດຕາພາສີແລະລະບຽບການຊາຍແດນ, ເຮັດໃຫ້ພວກເຂົາມີຄວາມບອບບາງຕໍ່ການເກັບພາສີອາກອນທີ່ບໍ່ເປັນທາງການແລະຄວາມຕ້ອງການສຳລັບການຈ່າຍເງິນຫຼາຍຄັ້ງເຊິ່ງໃຊ້ເວລາຫຼາຍ. ຄວນມີປ້າຍທີ່ສະແດງລາຍການພາສີອາກອນທີ່ມີຜົນປະຕິບັດຢູ່, ຄວນສະແດງໃຫ້ເຫັນອັດຕາພາສີທີ່ເປັນປັດຈຸບັນ, ແລະເຄື່ອງຊັ່ງນ້ຳໜັກກໍຄວນມີໃຫ້ພ້ອມ. ລະບົບແຈ້ງເສຍພາສີປະຕູດຽວສຳລັບການຄ້ານ້ອຍຕາມຊາຍແດນ SSCBT ຈະຫຼຸດຜ່ອນເວລາການກວດປ່ອຍສິນຄ້າຢູ່ຊາຍແດນ.

102. **ການນຳສະເໜີກົດບັດສຳລັບພໍ່ຄ້າ ແລະ ນາຍໜ້າຂ້າມແດນ.** ກົດບັດເຊື່ອວ່າຈະກຳນົດສິດແລະໜ້າທີ່ຂອງເຈົ້າໜ້າທີ່ຊາຍແດນ, ຊາວຄ້າຂ້າມຊາຍແດນລາຍນ້ອຍ SSCBT, ນາຍໜ້າແລະຜູ້ຂົນສົ່ງ, ແລະຈະສະໜອງຂໍ້ມູນຂ່າວສານກ່ຽວກັບກົດການປະພຶດ. ກົດບັດຈະເສີມຂະຫຍາຍທ່າທີຕໍ່ລອງຂອງຜູ້ໃຊ້ເສັ້ນຊາຍແດນທີ່ມີຄວາມບອບບາງທີ່ສຸດ ແລະ ຍົກສູງລະດັບຄວາມຮູ້ກ່ຽວກັບຂໍ້ກຳນົດກົດລະບຽບການຄ້າ. ກົດບັດການຂ້າມຊາຍແດນໄດ້ຖືກທົດລອງນຳໃຊ້ເປັນການທົດລອງຢ່າງສຳເລັດຜົນຢູ່ດ່ານ ມະວາມີ/ມະຄິນຈີ (Mwami/Mchinji) ລະຫວ່າງປະເທດມາລາວີ ແລະ ຊຳເບຍ.

103. ຂໍ້ມູນດ້ານບົດບາດຍິງຊາຍໃນພາກທຸລະກິດແມ່ນຈຳກັດຢູ່. ຂໍ້ມູນກ່ຽວກັບຜົນກະທົບຈາກສະພາບສິ່ງແວດລ້ອມທີ່ສຸດໂຊມລົງ ຕໍ່ ຊີວິດການເປັນຢູ່ ການພົວພັນໃນສັງຄົມ, ແລະ ການເຂົ້າຮ່ວມທາງເສດຖະກິດ ແມ່ນຍັງຈຳກັດຫຼາຍ. ບົດສຶກສາສາກົນທີ່ມີຢູ່ຊີ້ໃຫ້ເຫັນວ່າ ໃນຫຼາຍໆປະເທດມີປະກົດການ ແບ່ງແຍກເພດ, ຄວາມຮຸນແຮງທາງເພດ ໃນສະຖານທີ່ເຮັດວຽກ, ມີຄວາມບໍ່ເໝາະສົມໃນກິດຈະກຳການຕະຫຼາດ, ແລະ ຄວາມສ່ຽງດ້ານ ສຸຂະພາບ. ການປະເມີນທີ່ມີຢູ່ ຊີ້ໃຫ້ເຫັນວ່າ ບັນດາລະບຽບກົດໝາຍຂອງ ສປປ ລາວ ໃນຂົງເຂດການຄ້າ ແລະ ການລົງທຶນແມ່ນ ມີຄວາມເປັນກາງທາງເພດ, ແຕ່ແຜນການປັບປຸງກົດໝາຍສົ່ງເສີມການລົງທຶນ ແລະ ການຮ່າງແຜນດຳເນີນງານດ້ານການສົ່ງເສີມການດຳເນີນທຸລະກິດ ທີ່ມີຄວາມຮັບຜິດຊອບຕໍ່ສັງຄົມ ຄວນນຳໃຊ້ຂໍ້ມູນດ້ານເພດ ແລະ ປຶກສາຫາລືກັບຕົວແທນ ທີ່ມີເພດຍິງເປັນຜູ້ບໍລິຫານຕົ້ນຕໍ.

## 3.6 ການເງິນເພື່ອການຄ້າໃນ ສປປ ລາວ

ການປັບປຸງການບໍລິການເງິນເພື່ອການຄ້າໃຫ້ດີຂຶ້ນເປັນພາກສ່ວນທີ່ຕັດແຍກບໍ່ໄດ້ຂອງຂະແໜງການຄ້າພາຍນອກທີ່ມີການແຂ່ງຂັນກັນ

104. **ລະບົບການເງິນຂອງ ສປປ ລາວ ແມ່ນປະກອບດ້ວຍສະຖາບັນການເງິນທີ່ຂ້ອນຂ້າງຫຼາຍ, ເຊິ່ງຫຼາຍແຫ່ງກໍມີການໃຫ້ບໍລິການດ້ານການເງິນເພື່ອການຄ້າ.** ມີທະນາຄານ ແລະ ສາຂາ/ຫ້ອງການຜູ້ຕາງໜ້າຕ່າງປະເທດຫຼາຍກວ່າ 30 ແຫ່ງທີ່ດຳເນີນທຸລະກິດຢູ່ໃນ ສປປ ລາວ, ໃນນັ້ນມີທະນາຄານທຸລະກິດຂອງລັດ 3 ແຫ່ງ ແລະ ທະນາຄານເອກະຊົນ 7 ແຫ່ງ, ນັບລວມທັງທະນາຄານລູກ ແລະ ສາຂາຂອງທະນາ ຄານຕ່າງປະເທດ ຫຼື ຫ້ອງການຜູ້ຕາງໜ້າຂອງທະນາຄານສາກົນ. ຢ່າງໃດກໍ່ຕາມ, ທະນາຄານຂອງລັດມີສ່ວນແບ່ງຕະຫຼາດທີ່ສຳຄັນ, ມີເກືອບເຄິ່ງໜຶ່ງຂອງກະແສເງິນກູ້ແລະສອງສ່ວນສາມຂອງຊັບສິນ. ທະນາ ຄານທີ່ໃຫຍ່ທີ່ສຸດຂອງປະເທດ ຄື ທະນາຄານການຄ້າຕ່າງປະເທດ ຂອງ ລາວ BCEL, ຍັງເປັນທະນາ ຄານການຄ້າທີ່ໃຫຍ່ທີ່ສຸດ. ທັງເງິນກູ້ແລະເງິນຝາກຂອງລະບົບທະນາຄານໄດ້ຂະຫຍາຍຕົວຢ່າງວ່ອງໄວໃນທ້າຍຊຸມປີ 2010, ຄຽງຄູ່ກັບການຂະຫຍາຍຕົວຂອງເສດຖະກິດຢ່າງວ່ອງໄວ. ເຖິງຢ່າງໃດກໍ່ຕາມ, ການເຕີບໂຕຂອງເງິນກູ້ໄດ້ຫຼຸດລົງໃນທ່າມກາງຄວາມກັງວົນຈາກການຄວບຄຸມດູແລຂອງລັດ, ການຜະເຊີນກັບຄວາມສ່ຽງທີ່ເພີ່ມຂຶ້ນດ້ານອັດຕາແລກປ່ຽນຂອງທະນາຄານ ແລະ ການແຜ່ລະບາດຂອງໂຄວິດ-19. ປະ ມານເຄິ່ງໜຶ່ງຂອງປະຊາກອນຜູ້ໃຫຍ່ແມ່ນຢູ່ໃນລະບົບການທະນາຄານຕາມຮູບແບບ, ແຕ່ບໍ່ດົນມານີ້, ບັນ ດາສະຖາບັນການເງິນໄດ້ພັດທະນາການບໍລິການທາງເອເລັກໂຕຣນິກ, ລວມທັງການທະນາຄານທາງເອເລັກໂຕຣນິກ e-banking ແລະ ກະເປົາເງິນທາງເອເລັກໂຕຣນິກ e-wallet, ເພື່ອດຶງດູດເອົາປະຊາກອນທີ່ເຂົາເຈົ້າຍັງບໍ່ທັນໄດ້ໃຫ້ບໍລິການຢ່າງເປັນວຽກເປັນງານ. ການແຂ່ງຂັນລະຫວ່າງທະນາຄານມີຄວາມແຂ່ງ ແຮງໃນຊຸມປີມໍ່ໆມານີ້ໃນສະພາບການທີ່ອັດຕາດອກເບ້ຍແລະຄ່າບໍລິການທະນາຄານ, ລວມທັງເຄື່ອງມືການເງິນຂອງການຄ້າ, ແມ່ນໄດ້ຖືກຄວບຄຸມໂດຍລະບຽບການ. ໃນດ້ານພຶດຕິກຳ, ສິ່ງເຫລົ່ານີ້ກໍແຕກຕ່າງກັນໄປຢ່າງຫຼວງຫຼາຍ ໂດຍທົ່ວໄປຕາມແຕ່ລະທະນາຄານແລະປະເພດຂອງລູກຄ້າ.

105. **ການເຮັດທຸລະກຳທີ່ຕິດພັນກັບການຄ້າລະຫວ່າງປະເທດກໍ່ເພີ່ມຂຶ້ນຢ່າງໄວວາ, ສ່ວນໃຫຍ່ແມ່ນກັບຈີນ ແລະໄທ ທັງຂາໄປ ແລະ ຂາກັບ.** ກ່ອນການແຜ່ລະບາດພະຍາດ, ການຄ້າໄດ້ປະກອບສ່ວນຊຸກຍູ້ການຂະຫຍາຍຕົວດ້ານເສດຖະກິດຂອງປະເທດ, ກະຕຸ້ນຂະແໜງການຂຸດຄົ້ນ (ທອງແດງ, ໄມ້), ການສົ່ງອອກໄຟຟ້ານ້ຳຕົກ ແລະແຜນແພແຕ່ໃນລະດັບໜ້ອຍກວ່າ. ຈາກນັ້ນ, ການນຳເຂົ້າທີ່ຂະຫຍາຍຕົວແມ່ນລວມມີການນຳເຂົ້ານ້ຳມັນເຊື້ອໄຟ, ອຸປະກອນປະເພດທຶນ ແລະ ສິນຄ້າອຸປະໂພກ-ບໍລິໂພກ.

106. **ເນື່ອງຈາກ ສປປ ລາວ ບໍ່ໄດ້ນຳໃຊ້ການຄວບຄຸມການແລກປ່ຽນຢ່າງເຂັ້ມງວດ, ການຂາດເຂີນເງິນຕາຕ່າງປະເທດອາດຈະສົ່ງຜົນກະທົບຕໍ່ຜູ້ຄ້າຂາຍໃນທີ່ສຸດ.** ການຈຳກັດການແລກປ່ຽນເງິນຕາຕ່າງປະ ເທດເວົ້າແບບແຕ່ເຫດຫາຜົນ ກໍ່ບໍ່ໄດ້ໝາຍຄວາມວ່າຈະສົ່ງຜົນກະທົບຕໍ່ການສະໜອງທາງດ້ານການເງິນ(ສິນເຊື່ອ)ເພື່ອການຄ້າ. ການຄ້າ ແລະ ການຊຳລະເງິນພາຍໃນປະເທດແມ່ນນຳໃຊ້ເງິນຕາພາຍໃນປະເທດ (ເງິນກີບ), ແຕ່ການເຂົ້າເຖິງການແລກປ່ຽນເງິນຕາຕ່າງ

ປະເທດຜ່ານທະນາຄານ ຫຼື ສຳນັກງານແລກປ່ຽນເງິນຕາຕ່າງປະເທດທີ່ໄດ້ຮັບອະນຸຍາດ, ເພື່ອຈຸດປະສົງການນຳເຂົ້າຈາກຕ່າງປະເທດໃນດ້ານຫຼັກການແມ່ນບໍ່ຈຳກັດ. ໃນທາງກົງກັນຂ້າມ, ຕົວແທນຈຳໜ່າຍ ແລະ ທະນາຄານທີ່ໄດ້ຮັບອະນຸຍາດອາດຈະແລກປ່ຽນເງິນຕາຕ່າງປະເທດເປັນເງິນກີບ ເພື່ອອຳນວຍຄວາມສະດວກໃຫ້ແກ່ການຊຳລະສະສາງໃນທ້ອງຖິ່ນ. ນັກລົງທຶນຕ່າງປະເທດ ຢູ່ສປປ ລາວຫຼາຍຄົນ ຖືບັນຊີທັງເປັນເງິນຕາຕ່າງປະເທດ ແລະ ເງິນກີບທີ່ແລກປ່ຽນໄດ້ເພື່ອຊຳລະສະສາງກັບຕ່າງປະເທດ. ໃນຄວາມເປັນຈິງ, ລະດັບການນຳໃຊ້ເງິນໂດລາຂອງເສດຖະກິດແມ່ນຂ້ອນຂ້າງສູງ, ຍ້ອນວ່າທະນາຄານໄດ້ຮັບການຈັດຫາທຶນສ່ວນໜຶ່ງເພື່ອການຂະຫຍາຍຕົວຂອງເຂົາ ເຈົ້າໃນຕະຫຼາດສາກົນ. ການຊຳລະການນຳເຂົ້າໃນທຸກສະກຸນເງິນຂອງຜູ້ສົ່ງອອກຕ່າງປະເທດມາຍັງ ສປປ ລາວ ແມ່ນເປັນເລື່ອງທຳມະດາ (ເປັນເງິນໂດລາສະຫະລັດ, ເງິນບາດໄທ ແລະ ເງິນຢວນຈີນ). ນັບແຕ່ເລີ່ມມີການແຜ່ລະບາດຂອງໂຄວິດ-19, ຄວາມກົດດັນຕໍ່ດຸນການຊຳລະກັບຕ່າງປະເທດໄດ້ເພີ່ມຂຶ້ນ, ອັນໄດ້ນຳໄປສູ່ການກົດດັນທີ່ຫຼຸດລົງຕໍ່ກັບອັດຕາແລກປ່ຽນແລະຊ່ອງວ່າງລະຫວ່າງອັດຕາແລກປ່ຽນທາງການ ແລະ ອັດຕາແລກປ່ຽນຕາມຕະຫຼາດທົ່ວໄປ. ເງິນຕາຕ່າງປະເທດກໍ່ເລີ່ມຊອກຍາກ, ລວມທັງສຳລັບພໍ່ຄ້າ, ເປັນຈຸດໜຶ່ງທີ່ໄດ້ຍົກຂຶ້ນສົນທະນາໃນໜ່ວຍງານການບໍລິການທາງດ້ານການເງິນ.

107. **ທຸກໆທະນາຄານທຸລະກິດທີ່ສຳຄັນໆ ຖືວ່າມີຜະລິດຕະພັນການເງິນເພື່ອການຄ້າໃນຫລາກຫລາຍປະເພດເພື່ອໄວ້ຄອຍບໍລິການລູກຄ້າ**. ອັນນີ້ປະກອບມີ ຈົດໝາຍສິນເຊື່ອເພື່ອການນຳເຂົ້າແລະສົ່ງອອກ, ການຊຳລະການນຳເຂົ້າແລະສົ່ງອອກເມື່ອໄດ້ຮັບເອກະສານຈັດສົ່ງສິນຄ້າຜ່ານລະບົບທະນາຄານ, ໃບແລກເງິນແລະການຮັບຊື້ຫຼຸດໃບແລກເງິນທີ່ມີເອກະສານການສົ່ງອອກ, ການໃຫ້ທຶນແບບມີໃບສັນຍາໃຊ້ໜີ້ເມື່ອໄດ້ຂາຍສິນຄ້າ (ສຳລັບສິນຄ້ານຳເຂົ້າ), ການໃຫ້ກູ້ແກ່ຜູ້ຂາຍເພື່ອຜະລິດຂາຍໃຫ້ຜູ້ຊື້(ການເງິນກ່ອນການຈັດສົ່ງ), ພັນທະບັດທະນາຄານແລະການຄ້ຳປະກັນ, ເຊິ່ງທັງໝົດແມ່ນຮູບແບບ ທາງດ້ານການເງິນເພື່ອການຄ້າແບບດັ້ງເດີມ. ທະນາຄານຕ່າງໆໄດ້ເລີ່ມສະເໜີຈັດຫາ ເງິນທຶນໃຫ້ການຄ້າແບບບັນຊີເປີດ(ສົ່ງມອບສິນຄ້າກ່ອນຈຶ່ງຮັບຊຳລະຕາມທີຫລັງ), ການຮັບຊື້ໜີ້ຕ້ອງຮັບ ແລະ ການຈັດຫາທຶນແກ່ການສົ່ງອອກທີ່ຄ້ຳປະກັນດ້ວຍໜີ້ຕ້ອງຮັບ.

108. **ການນຳໃຊ້ສິ່ງອຳນວຍຄວາມສະດວກດ້ານການເງິນເພື່ອການຄ້າສຳລັບບໍລິສັດທ້ອງຖິ່ນແມ່ນຍັງຈຳກັດ**. ບໍລິສັດຕ່າງປະເທດທີ່ດຳເນີນທຸລະກິດຢູ່ໃນ ສປປ ລາວ ໃຊ້ການບໍລິການຕ່າງໆດ້ານການເງິນທີ່ທະນາຄານຕ່າງປະເທດທີ່ຕັ້ງຢູ່ໃນທ້ອງຖິ່ນ ຫຼື ຢູ່ປະເທດຕົ້ນທາງເປັນຜູ້ຈັດຫາໃຫ້. ບັນດາບໍລິສັດຂອງລາວບໍ່ຄ່ອຍມີການຮັບການຊ່ວຍເຫລືອທາງການເງິນແບບສະໄໝໃໝ່ຂອງລະບົບທະນາຄານພໍປານໃດ. ມີຫຼາຍເຫດຜົນສຳລັບເລື່ອງນີ້. ອີງຕາມຂະໜາດຂອງເສດຖະກິດ, ມີໂອກາດຫຼາຍກວ່າທີ່ພໍ່ຄ້າຂອງ ສປປ ລາວ ຈະເປັນວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ. ສຳລັບການນຳເຂົ້າສິນຄ້າອຸປະໂພກແລະບໍລິໂພກ, ຕົວຢ່າງ, ພໍ່ຄ້າທ້ອງຖິ່ນຈຳນວນຫຼາຍແມ່ນອີງໃສ່ການພົວພັນທີ່ໄດ້ສ້າງມາກັບຜູ້ຂາຍຢູ່ຕ່າງປະເທດເພື່ອໃຫ້ໄດ້ຮັບສິນເຊື່ອຈາກຜູ້ສະໜອງໂດຍກົງ, ເຖິງແມ່ນວ່າບໍ່ແມ່ນເງື່ອນໄຂທີ່ດີທີ່ສຸດ. ຢ່າງໃດກໍ່ຕາມ, ສິນເຊື່ອຂອງຜູ້ສະໜອງແມ່ນບໍ່ມີຢູ່ຕະຫລອດ. ເມື່ອບໍ່ມີຄວາມສຳພັນດັ່ງກ່າວ, ຜູ້ສົ່ງອອກໄປ ສປປ ລາວ ອາດຈະພຽງແຕ່ຂໍໃຫ້ຈ່າຍເປັນເງິນສົດລ່ວງໜ້າກ່ອນການຈັດສົ່ງກໍ່ໄດ້, ສະນັ້ນ ຈຶ່ງເທົ່າກັບເປັນການບັງຄັບໃຫ້ຜູ້ນຳເຂົ້າຈາກລາວມີການຊຳລະກ່ອນລ່ວງໜ້າ. ກົງກັນຂ້າມ, ຜູ້ສົ່ງອອກ ຂະໜາດນ້ອຍຂອງລາວທີ່ມີອຳນາດດ້ານຕະຫຼາດໜ້ອຍກໍ່ປະສົບກັບຄວາມຫຍຸ້ງຍາກໃນການຈະໄດ້ຮັບຊຳລະໃຫ້ທັນເວລາ. ລັກສະນະການຈັດຕຽມຜູ້ສະໜອງ-ຜູ້ຊື້ທີ່ມີຢູ່ແລ້ວແບບດັ້ງເດີມ ບໍ່ໄດ້ໝາຍຄວາມວ່າ ຈະບໍ່ມີຄວາມຕ້ອງການຄວາມຊ່ວຍເຫລືອດ້ານການເງິນເພື່ອການຄ້າ ທີ່ມີປະສິດທິພາບ ແລະ ມີບໍລິມາດທີ່ສູງຂຶ້ນ. ໂຮງງານຕັດຫຍິບ, ກະສິກຳ ແລະ ການປຸງແຕ່ງກະສິກຳ ແມ່ນມີຄວາມຕ້ອງການເຄື່ອງມືທາງການເງິນດ້ານການຄ້າທີ່ທັນສະ ໄໝກວ່າ, ລາຄາຖືກກວ່າ ແລະ ມີປະສິດທິພາບຫຼາຍຂຶ້ນ ເພື່ອສະໜັບສະໜູນການຂະຫຍາຍຕົວໄປສູ່ນາໆປະເທດ.

109. **ບັນດາບໍລິສັດຂະໜາດນ້ອຍປະສົບກັບສິ່ງທ້າທາຍ ໃນການເຂົ້າເຖິງເຄື່ອງມືການເງິນເພື່ອການຄ້າທີ່ມີຢູ່**. ໜຶ່ງໃນເຫດຜົນຕົ້ນຕໍທີ່ສະຖາບັນການເງິນອ້າງເຖິງໃນການອະທິບາຍເຫດຜົນຂອງການນຳໃຊ້ ຄວາມຊ່ວຍເຫລືອດ້ານການເງິນເພື່ອການຄ້າຊຶ່ງຍັງມີບໍ່ຫລາຍ ແມ່ນການຂາດການກະກຽມການຮ້ອງຂໍເງິນທຶນແລະລະດັບຈຳກັດຂອງຄວາມຮູ້ທາງດ້ານການເງິນຂອງບໍລິສັດ. ສິ່ງນີ້ກີດກັນບໍ່ໃຫ້ເຂົາເຈົ້າກຳນົດຄວາມຕ້ອງການຂອງເຂົາເຈົ້າຢ່າງຖືກຕ້ອງເໝາະສົມ ແລະຕອບສະໜອງຄວາມຕ້ອງການສຳລັບຄຳຮ້ອງຂໍທຶນ, ເຊິ່ງປະກອບມີ ຂໍ້ມູນການຮູ້ຈັກລູກຄ້າຂອງຕົນທັງໃຫ້ສາມາດລະບຸແລະພິສູດຕົວຕົນໄດ້, ການເກັບຮັກສາປື້ມບັນທຶກ, ການນຳສະເໜີການບັນທຶກການຈ່າຍອາກອນທີ່ເປັນປັດຈຸບັນຫຼືບັນທຶກການຊຳລະອາກອນ, ໃບເກັບເງິນທີ່ຍອມຮັບຮູ້ໄດ້ ແລະເອກະສານທາງການອື່ນໆຫຼື ກຳມະສິດ ຂອງ ຫລັກຊັບຄ້ຳປະກັນແລະການຄ້ຳປະກັນຕ່າງໆ. ບໍລິສັດຈຳນວນໜ້ອຍ ຈະມີຄວາມຮູ້ກ່ຽວກັບເຄື່ອງມືທາງດ້ານການເງິນເພື່ອການຄ້າທີ່ມີຢູ່ພ້ອມກັບການດຳເນີນການຂອງສິ່ງເຫລົ່ານີ້. ໃນທ້ອງຖິ່ນແມ່ນມີການໃຫ້ບໍລິການທຸລະກິດສຳລັບການກະກຽມປະກອບຄຳຮ້ອງ, ແຕ່ການບໍລິການດັ່ງກ່າວແມ່ນມີລາຄາແພງເກີນໄປໃນເງື່ອນໄຂທີ່ລູກຄ້າຍັງມີຂະໜາດນ້ອຍໂດຍສະເລ່ຍ ແລະການຮ້ອງຂໍເງິນທຶນທີ່ມີຄວາມເປັນໄປໄດ້ກໍ່ຍັງບໍ່ທັນມີຫລາຍ. ໃນເບື້ອງຂອງເຂົາເຈົ້າ, ບັນດາບໍລິສັດແລະອົງການຈັດຕັ້ງວິຊາຊີບໄດ້ມີຂໍ້ໂຕ້ແຍ້ງວ່າລູກຄ້າ (ພໍ່ຄ້າ) ຜະເຊີນກັບ ອັດຕາດອກເບ້ຍແລະຄ່າບໍລິການສູງໃນພາກປະຕິບັດ ແລະການໃຫ້ກູ້ຢືມທີ່ອີງໃສ່ຫຼັກຊັບທີ່ເປັນລະບົບ. ໃນດ້ານຫຼັກການ, ໄດ້ມີການສະເໜີໃຫ້ພິຈາລະນາແລ້ວກ່ຽວກັບຮູບແບບໃໝ່ສຸດຂອງການເງິນເພື່ອການຄ້າ, ເຊັ່ນ: ສິນເຊື່ອໝູນວຽນທຸລະກິດ/ຄູ່ຄ້າ ແລະການຮັບຊື້ໜີ້ຕ້ອງຮັບ, ແຕ່ສິ່ງເຫລົ່ານີ້ແມ່ນຍັງບໍ່ທັນໄດ້ມີການນຳສະເໜີ ແລະ ທັງບໍ່ໄດ້ນຳໃຊ້ຢ່າງເປັນລະບົບ.

110. **ຂໍ້ຈຳກັດດ້ານຄວາມຕ້ອງການແລະການສະໜອງ ໃນການເຂົ້າເຖິງການເງິນເພື່ອການຄ້າ**. ໃນດ້ານການສະໜອງ, ຄວາມຮູ້ໃນການບໍລິການທຸລະກຳລະຫວ່າງປະເທດສະໄໝໃໝ່ ແລະການບໍລິຫານຄວາມສ່ຽງ, ໂດຍສະເພາະສຳລັບສິນ

ເຊື່ອໝູນວຽນທຸລະກິດ/ຄູ່ຄ້າ (ການຈັດຫາທຶນໃຫ້ຕ່ອງໂສ້ການສະໜອງກໍຄືຜູ້ສະໜອງ) (ເຊິ່ງລວມເອົາທັງການໃຫ້ຜູ້ຜະລິດ ຫລືຈຳໜ່າຍກູ້ເງິນໂດຍຂາຍໜີ້ຕ້ອງຮັບ), ແມ່ນບໍ່ແຜ່ຫຼາຍໃນບັນດາທະນາຄານທ້ອງຖິ່ນທີ່ມີຢູ່. ເມື່ອທະນາຄານໄດ້ຮັບການຍື່ນຄຳຮ້ອງທີ່ກະກຽມບໍ່ໄດ້ຕາມແບບ ແຜນເພື່ອຂໍສິນເຊື່ອ, ພວກເຂົາເຈົ້າມັກຈະເລືອກທີ່ຈະສະເຫນີເງິນເບີກເກີນບັນຊີແລະເງິນທຶນໝູນວຽນໄລ ຍະສັ້ນປະເພດວົງເງິນກູ້ຢືມແບບໝູນວຽນ(ໃຊ້ແລ້ວຢືມໃໝ່), ຂຶ້ນກັບການໄດ້ຮັບຫຼັກຊັບຄ້ຳປະກັນ. ອັນນີ້ເປັນການຫຼຸດຜ່ອນຄ່າໃຊ້ຈ່າຍໃນການບໍລິຫານຂອງເຂົາເຈົ້າ. ລູກຄ້າປະຈຳຈຳນວນຫຼາຍມີການຮ້ອງຂໍທຶນໝູນວຽນແບບເອົາ 'ດ່ວນ' ເຊິ່ງເປັນການຈຳກັດຄວາມມີໄຫວພິບຂອງທະນາຄານໃນການເຈລະຈາສິນເຊື່ອການຄ້າອັນໃຫມ່, ມັນເປັນເລື່ອງງ່າຍກວ່າທີ່ທະນາຄານຈະສະເຫນີໃຫ້ເງິນເບີກເກີນບັນຊີ ຫຼືໃຫ້ທຶນໝູນວຽນໃນວົງເງິນສິນເຊື່ອສູງສຸດ. ຢ່າງໃດກໍ່ຕາມ, ສິ່ງເຫຼົ່ານີ້ແມ່ນຮູບແບບການປະກອບທຶນທີ່ແພງກວ່າສຳລັບທັງທະນາຄານແລະລູກຄ້າ. ການເງິນເພື່ອການຄ້າທີ່ມີໂຄງສ້າງ, ເຊິ່ງໃຊ້ການຄ້ຳປະກັນ ແລະ ການບັນທຶກຄວາມສ່ຽງເຊັ່ນດຽວກັນກັບເຕັກນິກການປະຢັດເງິນສົດ ຫຼື ການເພີ່ມປະສິດທິພາບຂອງການຖືເງິນສົດໃຫ້ພໍເໝາະ, ແມ່ນບໍ່ຄ່ອຍໄດ້ໃຊ້. ໃນດ້ານຄວາມຕ້ອງການ, ວິສາຫະກິດໄດ້ໂຕ້ແຍ້ງວ່າການຮ້ອງຂໍໃຫ້ມີການກູ້ຢືມທີ່ອີງ ໃສ່ຫຼັກຊັບຄ້ຳປະກັນທີ່ເປັນລະບົບ ເປັນການຈຳກັດຄວາມສາມາດໃນການກູ້ຢືມຂອງເຂົາເຈົ້າ. ຫຼັກຊັບຄ້ຳປະກັນແມ່ນມັກຈະເອົາມາເຮັດການຄ້ຳປະກັນໃນການສ້າງຕັ້ງບໍລິສັດແລະສ້າງຕັ້ງໂຮງງານ. ເງິນສົດ ແລະ ຫລັກຊັບຄ້ຳປະກັນທີ່ເປັນດິນກໍຂາດແຄນ; ເຖິງແມ່ນວ່າບໍລິສັດເງິນທຶນສາກົນ IFC ໄດ້ສົ່ງເສີມການສ້າງຕັ້ງບ່ອນຈົດທະບຽນສັງຫາລິມະຊັບ(ຫຼັກຊັບທີ່ສາມາດເຄື່ອນຍ້າຍໄດ້), ແຕ່ໃນທາງປະຕິບັດການໃຫ້ກູ້ຢືມແບບອີງໃສ່ສັງຫາລິມະຊັບແມ່ນບໍ່ມີເລື້ອຍປານໃດ, ດັ່ງທີ່ໄດ້ບັນຍາຍໄວ້ຂ້າງລຸ່ມນີ້.

111. **ການນຳໃຊ້ຈົດໝາຍສິນເຊື່ອທີ່ຍັງຈຳກັດ. ໃນຂະນະທີ່ຈົດໝາຍສິນເຊື່ອ ສາມາດອອກໄດ້ໂດຍທະນາຄານທ້ອງຖິ່ນ, ແຕ່ການນຳໃຊ້ກໍຍັງບໍ່ກວ້າງຂວາງ.** ຈົດໝາຍສິນເຊື່ອສ່ວນຫຼາຍແມ່ນຜູ້ສະໜອງຢູ່ຕ່າງປະເທດ ຫຼືເຈົ້າຂອງໂຮງງານໃນທ້ອງຖິ່ນເປັນຜູ້ຮຽກຮ້ອງຕ້ອງການ. ການຮັບຮູ້ເຖິງຄວາມສ່ຽງດ້ານສິນເຊື່ອເຮັດໃຫ້ມີຄວາມຈຳເປັນໃນມີການປະກັນໄພຕໍ່ຈົດໝາຍສິນເຊື່ອດັ່ງກາວ, ດັ່ງນັ້ນ, ຈຶ່ງມີຜົນຕໍ່ຄ່າໃຊ້ຈ່າຍລວມຂອງການສ້າງບໍລິການຄວາມຊ່ວຍເຫລືອທາງການເງິນແບບນີ້. ຂະບວນການສ່ວນໃຫຍ່ກໍແມ່ນຍັງເຮັດດ້ວຍມືແລະຫຍຸ້ງຍາກແບບໃດແບບໜຶ່ງ; ມັນຂຶ້ນກັບເອກະສານທີ່ຂ້ອນຂ້າງມີຈຳນວນຫຼວງຫຼາຍ, ເນື່ອງຈາກສະພາບບໍ່ມີຊາຍແດນຕິດທະເລຂອງ ສປປ ລາວ (ສະນັ້ນຈຶ່ງມີການສະສົມການຈັດສົ່ງ ແລະການຂົນສົ່ງທາງບົກ) ແລະ ການເພິ່ງພາທ່າເຮືອຕ່າງປະເທດ. ໃນສະພາບການນີ້, ຄ່າໃຊ້ຈ່າຍໃນການເຮັດຈົດໝາຍສິນເຊື່ອອາດຈະສູງ. ພະຍາດໂຄວິດ-19 ໄດ້ເຮັດໃຫ້ບັນດາຊາວຄ້າຂາຍ ແລະ ທະນາຄານຢຸດສະງັກ, ເປັນການກີດຂວາງຊົ່ວຄາວບັນດາເອກະສານເຊິ່ງບໍ່ສາມາດທີ່ຈະຮັບ, ຈັດສົ່ງ ແລະ ແລກປ່ຽນກັນໄດ້ໃນທົ່ວພາກພື້ນ. ຄວາມແຜ່ຫຼາຍຂອງການຂົນສົ່ງທາງບົກເຂົ້າມາຍັງ ສປປ ລາວ, ທຽບກັບການຂົນສົ່ງທາງທະເລ, ອາດອະທິບາຍວ່າເປັນຫຍັງເອກະສານການຂົນສົ່ງຈຶ່ງຂາດແຄນໃນບາງກໍລະນີ. ເຊັ່ນດຽວກັນກັບສິ່ງອຳນວຍຄວາມສະດວກດ້ານການຄ້າອື່ນໆສ່ວນຫລາຍ, ການເປີດຈົດໝາຍສິນເຊື່ອແມ່ນຕ້ອງມີຫຼັກຊັບ ຄ້ຳປະກັນ. ໃນດ້ານຫຼັກການ, ຫລັກຊັບຄ້ຳປະກັນຕົ້ນຕໍໃນຈົດໝາຍສິນເຊື່ອກໍຄືຕົວສິນຄ້າເອງ. ເຖິງວ່າຈະມີສິ່ງດັ່ງກາວ, ບັນດາທະນາຄານຫລັກແມ່ນຕ້ອງການຫຼັກຊັບຄ້ຳປະກັນທີ່ເປັນວັດຖຸ ແລະ ເງິນສົດ, ດັ່ງນັ້ນຈຶ່ງມີຄວາມເປັນໄປໄດ້ໃນການຫຼຸດຜ່ອນຈຳນວນລູກຄ້າທີ່ມີທ່າແຮງ. ຊັບສິນຕ່າງໆໄດ້ຖືກນຳໃຊ້, ອາດຈະເປັນສັງຫາລິມະຊັບ (ຕົວຢ່າງ, ອຸປະກອນ, ສິນຄ້າໃນສາງ), ແຕ່ມັກຈະເປັນເງິນສົດຫລາຍກວ່າ ແລະທີ່ດິນກໍເປັນຫຼັກຊັບທີ່ບັງຄັບໃຊ້ໄດ້, ເຮັດໃຫ້ເຈົ້າຫນີ້ມີຄວາມປອດໄພເພື່ອໃຫ້ປະຕິບັດຕາມການຄ້ຳປະກັນດັ່ງກາວໃນກໍລະນີການບໍ່ສາມາດໃຊ້ໜີ້ໄດ້ຍອນມີໜີ້ສິນເກີນຕົວ.[14] ການປ່ອຍສິນເຊື່ອທີ່ອີງໃສ່ຫຼັກຊັບຫຼືການສ້າງໃຫ້ມີຈົດໝາຍສິນເຊື່ອຂຶ້ນມາໃຊ້ງານແມ່ນສົມເຫດສົມຜົນຍ້ອນວ່າການຊຳລະຄືນເງິນກູ້ມັກຈະຊ້າ ທຽບກັບຕາ ຕະລາງການຊຳລະຄືນ ແລະ ວ່າໃນກໍລະນີຂອງຈົດໝາຍສິນເຊື່ອ, ການໄດ້ສິນຄ້າຄືນມາແມ່ນເຮັດໄດ້ຍາກໃນກໍລະນີເກີດຂໍ້ຂັດແຍ່ງເນື່ອງຈາກຂາດປະສົບການທາງດ້ານຕຸລາການກ່ຽວກັບກໍລະນີດັ່ງກາວ.

112. **ກົນໄກການຈັດຫາເງິນທຶນໃຫ້ການຄ້າທີ່ມີປະສິດທິພາບ ແລະ ມີຕົ້ນທຶນຖືກກວ່າເກົ່າແມ່ນມີຄວາມຈຳເປັນຕໍ່ຄວາມສາມາດໃນການແຂ່ງຂັນຂອງ ສປປ ລາວ ໂດຍສະເພາະສຳລັບຜູ້ສົ່ງອອກ.** ໃນປັດຈຸບັນ, ຄ່າໃຊ້ຈ່າຍສິ້ນເປືອງທີ່ສູງທາງດ້ານການເງິນ ຂອງຜູ້ນຳເຂົ້າແລະຜູ້ສົ່ງອອກແມ່ນເປັນຂໍ້ຈຳກັດຕໍ່ການຜະລິດເພື່ອໃຫ້ສາມາດແຂ່ງຂັນໄດ້ໃນ ສປປ ລາວ. ລະບົບປັດຈຸບັນນີ້ ມີທີທ່າວ່າຈະບໍ່ຍືນຍົງ ຖ້າ ສປປ ລາວ ປາດຖະໜາຢາກຂະຫຍາຍຂະແໜງການຄ້າ, ໂດຍສະເພາະໃນຂົງເຂດຕັດຫຍິບ, ອາຫານຈາກກະສິກຳ ແລະ ອຸດສາຫະກຳເບົາອື່ນໆທີ່ມີອະນາຄົດດີ. ລະບົບທີ່ອີງໃສ່ການໃຫ້ກູ້ຢືມທຶນໝູນວຽນໃນອັດຕາທີ່ສູງແມ່ນບໍ່ເໝາະສົມກັບການນຳເຂົ້າ ແລະການສົ່ງອອກທີ່ມີບໍລິມາດຫລາຍ, ເຊິ່ງອາດຈະຮຽກຮ້ອງໃຫ້ມີການຈັດຕຽມການແລະການຮັບປະກັນດ້ານການເງິນຂອງລະບົບຕອງໂສການຜະລິດ(ສິນເຊື່ອໝູນວຽນທຸລະກິດ), ແທນທີ່ຈະເປັນການໃຫ້ກູ້ຢືມເປັນກ້ອນແບບທັນທີ. ການນຳເຂົ້າ ແລະ ສົ່ງອອກສິນຄ້າໃນບໍລິມາດຫລາຍກໍ່ຍອມຕ້ອງການເງິນທຶນໃນບໍລິມາດຫລາຍ, ມີຜົດດ່ຽງຕ່ຳ(ລະຫວ່າງເງິນຢືມກັບມູນຄ່າຊັບສິນຄ້ຳປະ ກັນ). ລະບົບການໃຫ້ກູ້ຢືມແມ່ນມີຄວາມລຳອຽງຕໍ່ກັບວິສາຫະກິດທີ່ບໍ່ມີທີ່ດິນ, ບໍ່ມີເງິນສົດເພື່ອສົ່ງສິນຄ້າໄປປຸງແຕ່ງຢູ່ນອກປະເທດ, ເຊັ່ນ: ບັນດາບໍລິສັດທີ່ເປັນແບບສະບັບຂອງປະເທດອື່ນ, ໃນບັນດາທຸລະກິດປະເພດອາຫານປຸງແຕ່ງ, ເຄື່ອງຕັດຫຍິບ ແລະ ອຸດສາຫະກຳເບົາ. ໃນປັດຈຸບັນ, ຜູ້ຜະລິດຢູ່ໃນພື້ນທີ່/ທ້ອງຖິ່ນຈຳນວນຫນຶ່ງແມ່ນອີງໃສ່ການໃຫ້ຄວາມຊ່ວຍເຫລືອຈາກເຈົ້າຂອງຕ່າງປະເທດຂອງເຂົາເຈົ້າ ຫຼື ອີງ ໃສ່ທະນາຄານຕ່າງປະເທດຂອງພວກເຈົ້າຂອງເຫລົ່ານີ້. ບໍລິສັດປະຈຳທ້ອງຖິ່ນທີ່ເພິ່ງພາອາໄສການເງິນເພື່ອການຄ້າໃນທ້ອງຖິ່ນຢ່າງເຕັມທີ່, ເມື່ອຊອກຫາໄດ້, ໃນລາຄາທີ່ແພງກວ່າ ອາດຈະມີຄວາມເສຍປຽບ.

14. ໃນຊຸມປີມໍ່ໆມານີ້, ອົງການການເງິນສາກົນ (IFC, ກຸ່ມທະນາຄານໂລກ) ໄດ້ເຮັດວຽກທີ່ຊ່ວຍໃຫ້ SMEs ໄດ້ຮັບການຊ່ວຍເຫລືອດ້ານການເງິນທີ່ເປັນຂໍ້ສະດວກຫຼາຍຂຶ້ນໂດຍການຊ່ວຍສ້າງຕັ້ງການຈົດທະບຽນສັງຫາລິມະຊັບ(ຊັບເຄື່ອນທີ່ໄດ້)ແບບອອນລາຍ. ການຈົດທະບຽນໄດ້ເຮັດໃຫ້ຜູ້ກູ້ຢືມສາມາດໄດ້ຮັບການຊ່ວຍເຫລືອດ້ານການເງິນທີ່ເປັນຂໍ້ສະດວກດັ່ງກາວຢ່າງງ່າຍດາຍໂດຍການເອົາອຸປະກອນແລະສິນຄ້າໃນສາງເປັນຫລັກປະກັນ, ແທນທີ່ຈະແມ່ນໃບຕາດິນແລະຊັບສິນເພື່ອ ເປັນຫຼັກຊັບຄ້ຳປະກັນ. ໃນຂະນະທີ່ໃບຕາດິນແລະຊັບສິນຍັງຄົງເປັນສິ່ງຕ້ອງການ, ແຕ່ SMEs ຈຳນວນຫຼາຍພັດບໍ່ໄດ້ເປັນເຈົ້າຂອງທີ່ດິນບ່ອນທີ່ມີການດຳເນີນກິດຈະກຳທາງເສດຖະກິດ.

113. **ຜູ້ເຊື່ອມໂຍງທີ່ປະສົບຜົນສຳເລັດໃນການຄ້າລະຫວ່າງປະເທດ ຍັງແມ່ນປະເທດທີ່ໄດ້ຫຼຸດຜ່ອນຕົ້ນທຶນທາງດ້ານການເງິນຂອງການນຳເຂົ້າແລະສົ່ງອອກ.** ເຂົາເຈົ້າໄດ້ນຳໃຊ້ຈົດໝາຍສິນເຊື່ອ, ການເງິນຕ່ອງໂສ້ການຜະລິດ(ຈັດຫາທຶນໃຫ້ຜູ້ສະໜອງ), ການຂາຍໜີ້ຕ້ອງຮັບອອກ(factoring), ການສະຫລະສິດໃນໜີ້ທີ່ຈະຕ້ອງໄດ້ຮັບເພື່ອແລກກັບເງິນສົດແບບມອບເໝົາ(forfaiting) ແລະ ການປະກັນໄພສິນເຊື່ອ, ເຊິ່ງທັງໝົດນີ້ມີຄ່າທຳນຽມໜ້ອຍກວ່າ ແລະ ຖືກນຳໃຊ້ບໍ່ເຕັມສ່ວນຢູ່ ສປປ ລາວ. ຜະລິດຕະພັນເຫຼົ່ານີ້ຈຳນວນຫຼາຍແມ່ນອີງໃສ່ການຄ້ຳປະກັນ, ການບັນເທົາຄວາມສ່ຽງຕໍ່ການຊຳລະເງິນລະຫວ່າງຜູ້ຊື້ແລະຜູ້ຂາຍແລະການຊ່ວຍເຫລືອທາງການເງິນອື່ນໆທີ່ບໍ່ແມ່ນການກູ້ຢືມ. ລະບົບປັດຈຸບັນທີ່ອີງໃສ່ການໃຫ້ກູ້ຢືມທີ່ມີຫຼັກຊັບຄ້ຳປະກັນແມ່ນບໍ່ມີປະສິດທິພາບ, ເປັນການນຳໃຊ້ສິ່ງທີ່ມີໃນໃບສະຫລຸບຊັບສົມບັດຂອງທະນາຄານຫຼາຍເກີນໄປເມື່ອທຽບກັບລະບົບການຄ້ຳປະກັນການຈ່າຍເງິນ ແລະ ການບັນເທົາ ແລະບໍ່ໄດ້ຮັບຮູ້ລັກສະນະທີ່ມີຄວາມສ່ຽງຕ່ຳຂອງການເງິນເພື່ອການຄ້າ. ທາງເລືອກສຳລັບບັນຫານີ້ມີຢູ່, ເຊັ່ນ: ການຮັບຊື້ໜີ້ ຫຼືໂດຍທົ່ວໄປກໍໃຫ້ມີການເຂົ້າມາຊ່ວຍເລື້ອຍໆໃນການບໍລິຫານຈັດການເງິນໃຫ້ກັບທຸລະກິດໃນທັງໝົດລະບົບຕ່ອງໂສ້ການຜະລິດ, ເພື່ອແນໃສ່ນຳໃຊ້ໃຫ້ດີທີ່ສຸດຮອບວຽນເງິນສົດຂອງບໍລິສັດ ແລະ ຊັບພະຍາກອນໃນໃບສະ ຫລຸບຊັບສົມບັດຂອງທະນາຄານ. ຄ່າໃຊ້ຈ່າຍໃນການດຳເນີນການກັບຈົດໝາຍສິນເຊື່ອສາມາດຫຼຸດລົງໄດ້ໂດຍນຳໃຊ້ບຸກຄະລາກອນທີ່ມີຄຸນວຸດທິ, ເອກະສານມາດຕະຖານ ແລະເຕັກນິກເຄິ່ງດິຈິຕອນ. ການປະກັນໄພສິນເຊື່ອກໍ່ແມ່ນຮູບແບບທີ່ນິຍົມກັນ ຂອງການເງິນເພື່ອການຄ້າ ທີ່ບໍ່ແມ່ນຂອງທະນາຄານ ເຊັ່ນດຽວກັນ. ບໍລິສັດທີ່ມີຂໍ້ຈຳກັດດ້ານເງິນສົດບໍ່ມີຄວາມສົນໃຈຫຼືຄວາມຊ່ຽວຊານໃນການເປັນນາຍທະນາຄານສຳລັບບໍລິ ສັດຄູ່ຮ່ວມຂອງພວກເຂົາເຈົ້າ, ດັ່ງນັ້ນພວກເຂົາຈຶ່ງປະສົງຈະປະກັນໄພຄວາມສ່ຽງຂອງຕົນ. ສິ່ງນີ້ເກີດຂຶ້ນທົ່ວໄປໃນຕະຫລາດການເງິນເພື່ອການຄ້າ. ປະມານ 2 ພັນຕື້ໂດລາຂອງກະແສການປະກັນໄພສິນເຊື່ອໄລຍະສັ້ນແມ່ນໄດ້ຖືກບັນທຶກໄວ້ໃນແຕ່ລະປີ, ສ່ວນຫຼາຍຈາກການໃຫ້ກູ້ຢືມລະຫວ່າງບໍລິສັດ SME, ອີງຕາມ ສະຫະພາບກຸງເບີນ Berne Union, ສະມາຄົມຂອງອົງການສິນເຊື່ອເພື່ອການສົ່ງອອກແລະຜູ້ປະກັນໄພເອກະຊົນ.

114. **ທາງເລືອກທີ່ດີທີ່ສຸດ ຂອງຊາວຄ້າຂາຍບາງທີອາດຈະມີການສົນທະນາຢ່າງເປີດເຜີຍລະຫວ່າງອົງ ການສິດອຳນາດ, ພໍ່ຄ້າຊາວຂາຍ ແລະ ນາຍທະນາຄານ.** ດັ່ງນັ້ນຂໍ້ດີແລະຂໍ້ເສຍຂອງແຕ່ລະຮູບແບບຂອງການເງິນເພື່ອການຄ້າ (ຈົດຫມາຍສິນເຊື່ອ, ການຈັດຫາທຶນໂດຍອາໃສໜີ້ຕ້ອງຮັບ, ເງິນກູ້ການຄ້າ, ການປະກັນໄພສິນເຊື່ອ) ອາດສາມາດທີ່ຈະໄດ້ຮັບການພິນິດພິຈາລະນາເບິ່ງ ແລະປຽບທຽບກັບການພິຈາລະນາທີ່ກວ້າງກວ່າ (ການປົກປ້ອງຄວາມສ່ຽງຈາກການເໜັງຕີງຂອງອັດຕາແລກປ່ຽນເງິນຕາຕ່າງປະເທດ). ເຖິງຢ່າງໃດກໍຕາມ, ການນຳເອົາມາດຕະການແກ້ໄຂດ້ານການເງິນເພື່ອການຄ້າແບບໃໝ່ອັນໃດອັນໜຶ່ງມາໃຊ້ຈະຮຽກຮ້ອງໃຫ້ມີການສຶກສາຮຽນຮູ້ກ່ອນທາງດ້ານການເງິນໂດຍບັນດາບໍລິສັດການຄ້າ ແລະ ທະນາຄານ, ເຊິ່ງອາດຈະສົມທົບກັບບັນດາສະພາການຄ້າ, ທະນາຄານກາງ, ບັນດາກະຊວງທີ່ກ່ຽວຂ້ອງ ແລະ ບາງທີອົງການສາກົນທີ່ສຳພັນກັນ. ຕົວຢ່າງ, ການຈັດຫາທຶນໂດຍໃຊ້ໜີ້ຕ້ອງຮັບ ແລະ ໜີ້ຕ້ອງສົ່ງ ທາງການຄ້າ ສາມາດຊ່ວຍປັບປະລິມານເງິນສົດທີ່ຂາດແຄນຂອງ SMEs ໃຫ້ມີຄວາມພໍເໝາະພໍດີ, ແຕ່ຜູ້ໃຊ້ຕ້ອງມີຄວາມເຂົ້າໃຈກ່ຽວກັບເຕັກນິກທີ່ຂ້ອນຂ້າງງ່າຍດາຍເຫຼົ່ານີ້. ຄວາມບໍ່ກົງກັນຂອງມື້ຄົບເວລາຊຳລະລະຫວ່າງການຮັບເງິນຈາກການສົ່ງອອກ ຂອງເຂົາເຈົ້າອາດຈະເຮັດໃຫ້ເກີດບັນຫາກະແສເງິນສົດເຂົ້າ-ອອກ ທີ່ຮ້າຍແຮງ. ດັ່ງນັ້ນ, ມັນຈຶ່ງເປັນສິ່ງສຳຄັນທີ່ຈະໃຫ້ຄວາມຮູ້ແກ່ທະນາຄານ ແລະອຸດສາຫະກຳ ກ່ຽວກັບທ່າແຮງຂອງການຈັດຫາເງິນທຶນໄລຍະສັ້ນດ້ວຍໜີ້ຕ້ອງຮັບ ແລະ ໜີ້ຕ້ອງສົ່ງ. ສຳລັບຮູບແບບອື່ນໆຂອງການເງິນເພື່ອການຄ້າປະເພດການເປີດບັນຊີຂາຍເປັນເງິນເຊື່ອ (ຕິດໜີ້ສິນຄ້າກ່ອນແລະຊຳລະຕາມພາຍຫລັງຕາມກຳນົດ) ແລະການປະກັນໄພສິນເຊື່ອກໍເປັນແບບດຽວກັນ.

115. **ການສົ່ງເສີມການແກ້ບັນຫາທາງການເງິນເພື່ອການຄ້າແບບທາງເລືອກໃໝ່ ຮຽກຮ້ອງໃຫ້ມີການສົນ ທະນາແລກປ່ຽນກັບພາກສ່ວນກ່ຽວຂ້ອງຕົ້ນຕໍ.** ອັນນີ້ປະກອບມີບໍລິສັດການຄ້າແລະທະນາຄານ, ຮ່ວມກັບສະພາການຄ້າ (ເຊິ່ງສະໜອງຫຼັກສູດລະດັບສາກົນ), ທະນາຄານກາງ, ບັນດາກະຊວງທີ່ກ່ຽວຂ້ອງແລະບາງທີອາດມີອົງການສາກົນທີ່ກ່ຽວຂ້ອງ. ການສົນທະນາສາມາດກວມເອົາບັນຫາຕໍ່ໄປນີ້:

- ກວດກາຂໍ້ດີ ແລະ ຂໍ້ເສຍຂອງການປັບປຸງລະບົບຈົດໝາຍສິນເຊື່ອເພື່ອໃຫ້ຍືດເວລາ ແລະ ຫຼຸດຕົ້ນທຶນຂອງບໍລິສັດການຄ້າ, ປຽບທຽບອັນນີ້ກັບຂໍ້ດີ ແລະ ຂໍ້ເສຍຂອງຮູບແບບທີ່ເປັນທາງເລືອກຂອງການຈັດຫາທຶນແກ່ການຄ້າ, ໃນສະພາບການຂອງລາວ.
- ການສົ່ງເສີມການສຶກສາຮຽນຮູ້ດ້ານການເງິນໃນ SMEs ແລະໃນບັນດາທະນາຄານກ່ຽວກັບການສ້າງໃຫ້ມີການນຳໃຊ້ຈົດໝາຍສິນເຊື່ອ, ການຈັດຫາທຶນໂດຍການຂາຍໜີ້ຕ້ອງຮັບ, ການຈັດຫາເງິນທຶນໃຫ້ຜູ້ສະ ໜອງ (ໂດຍມີຜູ້ໃຫ້ກູ້ມາຊ່ວຍຊຳລະຄ່າຂາຍສິນຄ້າໃຫ້ກ່ອນໂດຍມີການຮັບຮູ້ມູນຄ່າຈາກຜູ້ຊື້ສິນຄ້າ) ແລະ ການປະກັນໄພສິນເຊື່ອການຄ້າ (ປະກັນຄວາມສ່ຽງຈາກການບໍ່ໄດ້ຮັບຊຳລະເງິນຄ່າສິນຄ້າຫລືບໍລິການ); ສົ່ງເສີມການສຶກສາຮຽນຮູ້ກ່ຽວກັບລັກສະນະທີ່ມີຄວາມສ່ຽງຕ່ຳຂອງຜະລິດຕະພັນການເງິນເພື່ອການຄ້າ, ອີງຕາມເອກະສານທີ່ເປີດເຜີຍໂດຍສະພາການຄ້າສາກົນ.
- ການສ້າງບົດສະຫຼຸບຂອງເຄື່ອງມືທາງການເງິນທີ່ໄດ້ກ່າວມາຂ້າງເທິງໃນ 1 ຫຼື 2 ໜ້າເຈ້ຍ ແລະການເຜີຍແຜ່ໃນບັນດາສະມາຄົມອຸດສາຫະກຳຕົ້ນຕໍ. ອອກແບບແລະຈັດຕັ້ງປະຕິບັດການສຳຫຼວດເພື່ອປະເມີນຄວາມຕ້ອງການທີ່ເປັນໄປໄດ້ສຳລັບຜະລິດຕະພັນເຫຼົ່ານີ້ແລະຄວາມຕ້ອງການສຳລັບການສຶກສາຮຽນຮູ້ໃນເລື່ອງດັ່ງກ່າວ.

# ບົດທີ 4 ນະໂຍບາຍການຄ້າ

116. **ບົດນີ້ສະຫລຸບຄວາມເລື່ອງນະໂຍບາຍການຄ້າໃນ ສປປ ລາວ ແລະ ທ່າອ່ຽງລວມຂອງຜົນງານການເຄື່ອນໄຫວດ້ານການສົ່ງອອກນັບຕັ້ງແຕ່ບົດວິໄຈການເຊື່ອມໂຍງເຂົ້າສາກົນດ້ານການຄ້າຄັ້ງທີ່ຜ່ານມາ (DTIS) 2012, ໂດຍປຽບທຽບ ສປປ ລາວ ກັບບັນດາຄູ່ຄ້າໃນພາກພື້ນ ແລະ ໂດຍສຸມໃສ່ການຄ້າລະຫວ່າງປະເທດທີ່ຢູ່ໃນພາກພື້ນ.** ການສົນທະນາກ່ຽວກັບນະໂຍບາຍການຄ້າແມ່ນສຸມໃສ່ສັນຍາການຄ້າຂອງສປປ ລາວ ທີ່ມີຢູ່ ກ່ອນທີ່ຈະພັນລະນາເຖິງໂຄງສ້າງຂອງການປົກປ້ອງແບບໃນນາມ(ຕາມອັດຕາພາສີທີ່ກຳນົດ), ເຊິ່ງວັດແທກຜົນກະທົບຂອງ ອັດຕາພາສີຕໍ່ການເພີ່ມຂຶ້ນຂອງລາຄາ ພາຍໃຕ້ອັດຕາພາສີທົ່ວໄປແລະອັດຕາທີ່ນຳໃຊ້ຈິງ.

117. **ໃນໄລຍະ 30 ປີຜ່ານມາ ການຄ້າໂລກຂະຫຍາຍຕົວໄວກວ່າ GDP ແລະ ການຄ້າ ໄດ້ເປັນສ່ວນໜຶ່ງຂອງຕ່ອງໂສ້ມູນຄ່າຂອງໂລກ (GVCs) ຢ່າງນັບມື້ເພີ່ມຂຶ້ນ.** ການຂະຫຍາຍຕົວຢ່າງໄວວາຂອງ GVCs ໄດ້ສ້າງວຽກເຮັດງານທຳໃຫ້ຫຼາຍລ້ານຄົນໃນບັນດາປະເທດທີ່ມີລາຍໄດ້ຕໍ່າກວ່າ. ບົດລາຍງານຂອງທະນາຄານໂລກໃນເມື່ອບໍ່ດົນມານີ້ (ບົດລາຍງານການພັດທະນາໂລກ, 2020) ພົບວ່າການເຂົ້າຮ່ວມໃນ GVC ເພີ່ມຂຶ້ນ 1 ສ່ວນຮ້ອຍເຮັດໃຫ້ລາຍໄດ້ຕໍ່ຫົວຄົນເພີ່ມຂຶ້ນຫຼາຍກວ່າ 1 ສ່ວນຮ້ອຍ. ອັນນີ້ແມ່ນການເພີ່ມຫຼາຍກວ່າສອງເທົ່າຂອງຄ່າສະເລຍສຳລັບການຄ້າແບບດັ້ງເດີມ. ພໍດີກ່ອນການແຜ່ລະບາດ ຂອງພະຍາດ, GVCs ກວມເອົາເຄິ່ງໜຶ່ງຂອງການຄ້າທົ່ວໂລກ. ບັນດາພື້ນຖານເສດຖະກິດທີ່ໄດ້ທຳລາຍສະຖິຕິໃນການດຶງດູດການລົງທຶນໂດຍກົງຈາກຕ່າງປະເທດ (FDI) ເພື່ອເຂົ້າຮ່ວມໃນ GVC ແມ່ນມີຄວາມເປັນມິດກັບທຸລະກິດ ແລະ ການລົງທຶນຫລາຍກວ່າ ແລະ ໄດ້ຫຼຸດຕົ້ນທຶນຂອງການເຊື່ອມຈອດລົງ. ໃນເມື່ອການຜະລິດມີສາຍກ່ຽວພັນກັນໃນບັນດາປະເທດຕ່າງໆ, ການຮ່ວມມືສາກົນເພື່ອແນໃສ່ຫຼຸດຜ່ອນຕົ້ນທຶນທາງການຄ້າ ແລະ ການຊຸກຍູ້ການລົງທຶນຈຶ່ງເປັນສິ່ງຈຳເປັນຂາດບໍ່ໄດ້. ຕໍ່ເລື່ອງນີ້, ການເຂົ້າຮ່ວມເຄື່ອນໄຫວອັນຕັ້ງໜ້າຂອງ ສປປ ລາວ ໃນເຂດການຄ້າເສລີອາຊຽນ ແລະ ສັນຍາການຮ່ວມມືເສດຖະກິດແບບຮອບດ້ານລະດັບພາກພື້ນ (RCEP), ພ້ອມກັບພັນທະຜູກພັນຫຼາຍຝ່າຍທີ່ມີຕໍ່ WTO ແມ່ນມີຄວາມສຳຄັນຢ່າງຍິ່ງເພື່ອເລັ່ງການລົງທຶນ ແລະ ເພີ່ມອັດຕາການເຕີບໂຕ.

118. **ສປປ ລາວ ເປັນສະມາຊິກຂອງອົງການໆຄ້າໂລກແບບຫຼາຍຝ່າຍ ແລະ ສັນຍາການຄ້າພາກພື້ນຫຼາຍສະບັບ.** ສປປ ລາວ ແມ່ນສະມາຊິກຂອງອົງການການຄ້າໂລກ (WTO) ແລະມີສັນຍາການຄ້າຫຼາຍສະບັບໃນພາກພື້ນ ເຊິ່ງລວມທັງເຂດການຄ້າເສລີຂອງສະມາຄົມປະຊາຊາດອາຊີຕາເວັນອອກສຽງໃຕ້ (ອາຊຽນ) ແລະ RCEP. ສປປ ລາວ ຍັງເປັນພາຄີຂອງສັນຍາການຄ້າເສລີອາຊຽນຫຼາຍສະບັບກັບປະເທດທີ 3 ເຊັ່ນ: ອົດສະຕາລີ, ນິວຊີແລນ, ຈີນ, ອິນເດຍ, ຍີ່ປຸ່ນ, ສ.ເກົາຫຼີ, ຮົງກົງ, ເປັນຜູ້ລົງນາມໃນສັນຍາການຄ້າອາຊີປາຊີຟິກ (APTA) ກ່ຽວກັບສິນຄ້າ ແລະ APTA ກ່ຽວກັບການບໍລິການ. ສປປ ລາວ ຍັງມີສັນຍາສອງຝ່າຍທີ່ມີມາແຕ່ດົນນານສອງສະບັບກັບໄທ ແລະ ຫວຽດນາມ ເຖິງແມ່ນວ່ານັບແຕ່ປີ 1997 ເປັນຕົ້ນມາ, ສັນຍາດັ່ງກ່າວໄດ້ຖືກລວມເຂົ້າໄປໃນກົດກະຕິກາຂອງອາຊຽນ .

119. **ສັນຍາການຄ້າສິນຄ້າຂອງອາຊຽນ (ATIGA) ໄດ້ມີຜົນບັງຄັບໃຊ້ໃນປີ 2010.** ATIGA ໄດ້ປັບປຸງສັນຍາເຂດການຄ້າເສລີອາຊຽນກ່ອນໜ້ານີ້, ອັດຕາພາສີທີ່ມີຜົນບັງຄັບໃຊ້ຮ່ວມກັນຂອງ AFTA (CEPT), ແລະ ນອກຈາກສິ່ງອື່ນໆແລ້ວຍັງຈັດໃຫ້ມີການຍົກເລີກອັດຕາພາສີຢ່າງສົມບູນ ພາຍໃນອາຊຽນ. ສປປ ລາວ ໄດ້ຍົກເລີກພາສີນຳເຂົ້າຂອງທຸກສິນຄ້າຈາກປະເທດສະມາຊິກອາຊຽນ ໃນປີ 2018 ໂດຍຍົກເວັ້ນບັນຊີລາຍການສິນຄ້າສະຫງວນໄວ້ຖາວອນ , ແລະ 275 ສິນຄ້າໃນບັນຊີລາຍການສິນຄ້າກະທົບໄວ ແລະບໍ່ມີສິນຄ້າຢູ່ໃນບັນຊີລາຍການທີ່ກະທົບໄວສູງ.

120. **ບົດ DTIS ປີ 2012 ໄດ້ຍົກໃຫ້ເຫັນເຖິງຄວາມຈຳເປັນຂອງ ສປປ ລາວ ເພື່ອໃຫ້ໃຊ້ປະໂຫຍດຈາກການສົ່ງອອກທີ່ໄດ້ຈາກບໍ່ແຮ່ ແລະ ໄຟຟ້ານ້ຳຕົກ ເພື່ອຊຸກຍູ້ໃຫ້ມີຄວາມຫຼາກຫຼາຍທາງດ້ານເສດຖະກິດໂດຍວິທີພັດທະນາຂະແໜງການທີ່ບໍ່ແມ່ນຊັບພະຍາກອນທີ່ສາມາດຊື້ຂາຍໄດ້ໃຫ້ຈະເລີນຂຶ້ນ.** ການສົ່ງອອກຊັບພະຍາກອນທຳມະຊາດດ້ານໄຟຟ້າ, ໄມ້ ແລະ ທອງແດງຍັງຄົງເປັນແຫລ່ງສຳຄັນຂອງເງິນຕາຕ່າງປະເທດ, ເຊິ່ງກວມເອົາ 70% ຂອງການສົ່ງອອກທັງໝົດ, ຕາມດ້ວຍການເຊື່ອມສຳພັນກັບເສດຖະກິດພາຍໃນປະເທດແບບຈຳກັດ, ການສ້າງວຽກເຮັດງານທຳໜ້ອຍ ແລະ ຜົນຂ້າງຄຽງທາງລົບຕໍ່ສະພາບແວດລ້ອມ. ການເອື່ອຍອີງໃສ່ການສົ່ງອອກທີ່ໄດ້ຈາກບໍ່ແຮ່ອີກຕໍ່ໄປ ເຮັດໃຫ້ ສປປ ລາວ ມີຄວາມບອບບາງຕໍ່ສະພາບການເໜັງຕີງຂອງລາຄາ. ໃນປີ 2012, ທະນາຄານໂລກຄາດຄະເນວ່າ ຊັບພະຍາກອນບໍ່ແຮ່ ແລະ ຊັບພະຍາກອນນ້ຳຈະປະກອບສ່ວນ 25% ຂອງ GDP ໃນປີ 2020. ໄດ້ເນັ້ນໜັກເຖິງຄວາມສຳຄັນຂອງການຂະຫຍາຍຕົວຂອງຂະແໜງການທີ່ບໍ່ແມ່ນຊັບພະຍາກອນ, ໂດຍສະເພາະແມ່ນຜະລິດຕະພັນກະສິກຳທີ່ມີມູນຄ່າສູງເພື່ອສ້າງວຽກເຮັດງານທຳ, ເຮັດໃຫ້ເສດຖະກິດມີຄວາມຫລາກຫລາຍ ແລະ ມີຄວາມສາມາດຟື້ນຕົວໄດ້ໄວເມື່ອຖືກສະພາບກະທົບ.

121. **ສປປ ລາວ ໄດ້ເຂົ້າເປັນສະມາຊິກ ອັນດັບທີ 158 ຂອງ WTO ໃນວັນທີ 2 ກຸມພາ 2013 ແລະ ໄດ້ມີກອງປະຊຸມທົບທວນນະໂຍບາຍການຄ້າຄັ້ງທຳອິດໃນເດືອນ ພະຈິກ 2019.**[18] ສປປ ລາວ ຍັງເປັນສະມາຊິກຂອງສັນຍາເຂດການຄ້າເສລີອາຊຽນ ແລະ ສັນຍາການຄ້າສິນຄ້າອາຊຽນ; ແລະໃນເດືອນພະຈິກ 2020 ກໍໄດ້ເຂົ້າຮ່ວມ RCEP ເຊິ່ງປະກອບມີ 15 ປະເທດ. RCEP ແມ່ນສັນຍາການຄ້າເສລີໃນພາກພື້ນທີ່ຕໍ່ຍອດຈາກສັນຍາການຄ້າເສລີທີ່ມີຢູ່ແລ້ວຂອງລາວ ແລະລວມເອົາຈີນ ທີ່ເປັນຄູ່ຄ້າໃຫຍ່ທີ່ສຸດຂອງຕົນ.

18. ການທົບທວນນະໂຍບາຍການຄ້າ, ລາຍງານໂດຍກອງເລຂາ, ສປປ ລາວ, ວັນທີ 2 ມິຖຸນາ 2020. WT/TPR/S/394/Rev.1

122. **RCEP ມີຄວາມໝາຍໝັ້ນໃນການເປັນພາກພື້ນທີ່ເປີດ ແລະ ສ້າງໂອກາດທີ່ເພີ່ມຂຶ້ນໃຫ້ແກ່ການລົງທຶນ ແລະ ການຄ້າ.** ສປປ ລາວ, ພ້ອມກັບບັນດາປະເທດສະມາຊິກອາຊຽນ ແລະ 5 ຄູ່ເຈລະຈາຂອງອາຊຽນ ໃນພາກພື້ນ ທີ່ອາຊຽນ ມີສັນຍາການຄ້າເສລີນຳ (FTA) ຄື: ອົດສະຕຣາລີ, ຈີນ, ຍີ່ປຸ່ນ, ສ.ເກົາຫຼີ, ນິວຊີແລນ, ແມ່ນໄດ້ເຂົ້າຮ່ວມ RCEP. RCEP ແມ່ນ FTA ທີ່ໃຫຍ່ທີ່ສຸດໃນໂລກ, ກວມເອົາປະມານ 28 ສ່ວນຮ້ອຍຂອງການຄ້າທົ່ວໂລກ. ສັນຍາ RCEP ໄດ້ສະແດງໃຫ້ເຫັນຄຳໝັ້ນສັນຍາທີ່ຈະເປັນພາກພື້ນທີ່ເປີດກວ້າງ. ອັນນີ້ສະແດງເຖິງບາດກ້າວທີ່ດີໃນຊ່ວງໄລຍະຄວາມບໍ່ແນ່ນອນທີ່ເກີດຂຶ້ນຈາກການແຕກແຍກອອກເປັນສ່ວນໆຂອງ GVCs ຍ້ອນການແຜ່ລະບາດຂອງພະຍາດ COVID-19. RCEP ລວມມີການໃຫ້ຄຳໝັ້ນສັນຍາຕໍ່ຂອບລະບຽບແຫລ່ງກຳເນີດສິນຄ້າ (ROO) ອັນດຽວສຳລັບຜູ້ລົງນາມທັງໝົດ. ROO ຮຽກຮ້ອງໃຫ້ມີເງື່ອນໄຂວ່າສິນຄ້ານັ້ນຕ້ອງ ໜຶ່ງແມ່ນຊື້ມາຈາກ ຫລືປຸງແຕ່ງຢູ່ໃນພາກພື້ນດ້ວຍມູນຄ່າ 40 ສ່ວນຮ້ອຍ ຫຼືມີການປ່ຽນແປງລະຫັດພ້ອມຊື່ສິນຄ້າໃນສາລະບານອັດຕາພາສີເອກະພາບ ລະດັບ HS 4 ຕົວເລກ. RCEP ລວມມີຈີນ, ຄູ່ຄ້າລາຍໃຫຍ່ທີ່ສຳຄັນຂອງ ສປປ ລາວ. ການເຂົ້າເຖິງຕະຫຼາດໄດ້ດີຂຶ້ນພ້ອມກັບການເປີດເສັ້ນທາງລົດໄຟກັບຈີນຕາມກຳນົດເວລາ ເປັນສິ່ງບົ່ງບອກວ່າຈະເປັນການເພີ່ມຄວາມດຶງ ດູດຂອງ ສປປ ລາວໃນດ້ານການລົງທຶນແລະການຄ້າ. ເພື່ອໃຫ້ ສປປ ລາວປະຕິບັດໂອກາດເຫຼົ່ານີ້ໃຫ້ເກີດຜົນຕົວຈິງໄດ້ຢ່າງຄົບຖ້ວນ, ຈຳເປັນຕ້ອງໄດ້ມີການປັບປຸງສະພາບແວດລ້ອມທີ່ເອື້ອອຳນວຍທາງດ້ານທຸລະກິດຕື່ມອີກ.

123. **ໃນການເປີດເສລີການບໍລິການ, RCEP ມີຄວາມຫມັ້ນໝາຍທີ່ຈະໃຊ້ວິທີກຳນົດໃຫ້ມີ 'ບັນຊີທີ່ບໍ່ເປີດ/ບັນຊີຄວບຄຸມ' (negative list) ສຳລັບລາຍການສະຫງວນ.** ນອກເຫນືອຈາກການເຂົ້າເຖິງຕະຫຼາດທີ່ເພີ່ມຂຶ້ນສຳລັບສິນຄ້າ, RCEP ປະກອບມີການຄ້າບໍລິການແລະໂດຍສະເພາະໄດ້ອ້າງອີງເຖິງການຄ້າຜ່ານເອເລັກໂຕຣນິກ, ການບໍລິການດ້ານການເງິນ, ດ້ານວິຊາຊີບ ແລະ ດ້ານໂທລະຄົມ. ການເປີດເສລີການບໍລິການທີ່ສຳຄັນເຫຼົ່ານີ້ ຈະເສີມສ້າງຄວາມສາມາດໃນການແຂ່ງຂັນທີ່ເພີ່ມຂຶ້ນໃນອຸດສາຫະກຳປຸງແຕ່ງ ແລະ ເຮັດໃຫ້ສາຍສຳພັນ ຂອງ GVC ດ້ານການບໍລິການຄວາມກ້າວໜ້າ. RCEP ຍັງຫັນໄປໃຊ້ວິທີການ 'ບັນຊີສະຫງວນ' ເຊິ່ງໂດຍລວມແມ່ນຖືວ່າເປີດເສລີທຸກຂະແໜງການ, ເວັ້ນເສຍແຕ່ຖືກຍົກເວັ້ນເປັນການສະ ເພາະ. ໂດຍການຫຼຸດຜ່ອນຄວາມບໍ່ແນ່ນອນດ້ານລະບຽບການ, ວິທີການ "ບັນຊີສະຫງວນ" ເຮັດໃຫ້ໝັ້ນໃຈວ່າຈະເພີ່ມທະວີການຄ້າ ແລະການລົງທຶນໃນພາກພື້ນໃນຂະແໜງການບໍລິການ, ຫຼຸດຜ່ອນຕົ້ນທຶນທາງການຄ້າ ແລະການສ້າງວຽກເຮັດງານທຳ.

124. **ກະຊວງອຸດສາຫະກຳ ແລະ ການຄ້າເປັນອົງການຫລັກໃນວຽກງານການຄ້າ, ແຕ່ກໍຍັງມີຫຼາຍກະຊວງ ແລະ ອົງການຂອງລັດຖະບານທີ່ມີໜ້າທີ່ຮັບຜິດຊອບກ່ຽວກັບການຄ້າ.** ກະຊວງອຸດສາຫະກຳ ແລະ ການຄ້າ (MOIC) ຮັບຜິດຊອບໃນການສ້າງ, ຈັດຕັ້ງປະຕິບັດ ແລະ ປະສານງານນະໂຍບາຍການຄ້າ ແລະ ເປັນຈຸດປະສານງານຂອງ WTO, ສັນຍາການຄ້າໃນພາກພື້ນ ແລະ ໂຄງການເຄືອຂ່າຍການເຊື່ອມໂຍງ ເຂົ້າສາກົນດ້ານການຄ້າ (EIF). ກະຊວງອື່ນໆກໍກ່ຽວຂ້ອງໃນດ້ານນະໂຍບາຍ ແລະ ການຄຸ້ມຄອງການຄ້າເຊັ່ນກັນ. ນອກຈາກສຳນັກງານນາຍົກລັດຖະມົນຕີ, ທະນາຄານແຫ່ງ ສປປ ລາວ ແລະ ກະຊວງການເງິນແລ້ວ, ບັນດາກະຊວງຕ່າງໆກໍລ້ວນແຕ່ມີໜ້າທີ່ຮັບຜິດຊອບໃນການຄຸ້ມຄອງນະໂຍບາຍ ແລະ ລະບຽບການທີ່ສົ່ງຜົນກະທົບຕໍ່ການຄ້າ, ດັ່ງທີ່ສະແດງຢູ່ໃນຕາຕະລາງ 4.1.

### ຕາຕະລາງ 4.1 ກະຊວງ ແລະ ອົງການຂອງລັດຖະບານທີ່ກ່ຽວຂ້ອງໃນວຽກງານການຄ້າ

| **ກະຊວງສາຍຕັ້ງ** | **ຄວາມຮັບຜິດຊອບດ້ານວິຊາການ** |
|---|---|
| **ກະສິກຳ & ປ່າໄມ້** | **ນະໂຍບາຍກະສິກຳ, ບັນດາມາດຕະການສຸຂະອານາໄມ ແລະ ສຸຂະອະນາໄມພືດ (SPS)** |
| **ສາທາລະນະສຸກ** | **ຄວາມປອດໄພຂອງອາຫານ ແລະ ຢາຕໍ່ສຸຂະພາບ** |
| **ໂຍທາທິການ & ຂົນສົ່ງ** | **ສິ່ງກີດຂວາງດ້ານເຕັກນິກຕໍ່ການຄ້າ(TBT)** |
| **ພະລັງງານ & ບໍ່ແຮ່** | **TBT, ການປົກປັກຮັກສາສິ່ງແວດລ້ອມ** |
| **ພາຍໃນ** | **TBT** |
| **ຖະແຫຼງຂ່າວ,ວັດທະນະທຳ & ທ່ອງທ່ຽວ** | **ສິດທິດ້ານຊັບສິນທາງປັນຍາ (IPR), ລິຂະສິດ** |
| **ວິທະຍາສາດ & ເຕັກໂນໂລຊີ** | **TBT ແລະ IPRs** |

125. **ຄະນະກຳມະການປະສານງານລະດັບຊາດເປັນຜູ້ປະສານດ້ານນະໂຍບາຍການຄ້າ.** ພາຍຫຼັງເຂົ້າເປັນສະມາຊິກ WTO, ສປປ ລາວ ໄດ້ສ້າງຕັ້ງຄະນະກຳມະການປະສານງານລະດັບຊາດ (NSC) ວ່າດ້ວຍການເຊື່ອມໂຍງເສດຖະກິດກັບສາກົນ ເພື່ອປະສານນະໂຍບາຍການຄ້າຫຼາຍຝ່າຍ, ພາກພື້ນ ແລະ ສອງຝ່າຍ. ມີຮອງນາຍົກລັດຖະມົນຕີເປັນປະທານ NSC, ມີລັດຖະມົນຕີວ່າການກະຊວງການຕ່າງປະເທດແລະລັດຖະມົນຕີກະຊວງການຄ້າເປັນຮອງປະທານ. ພາຍຫຼັງການຕົກລົງ ຂອງ ສປປ ລາວ ໃນປີ 2015 ວ່າດ້ວຍການໃຫ້ສັດຕະຍາບັນສັນຍາການອຳນວຍຄວາມສະດວກທາງດ້ານການຄ້າ WTO (TFA), ຄະນະກຳມະການອຳນວຍຄວາມສະດວກດ້ານການຄ້າແຫ່ງຊາດ (NTFC) ໄດ້ຮັບການສ້າງຕັ້ງຂຶ້ນໂດຍມີການເຂົ້າຮ່ວມຈາກບັນດາກະຊວງທີ່ສຳຄັນຂອງລັດຖະບານ ແລະ ພາກເອກະຊົນ.

126. **ກອງປະຊຸມທຸລະກິດລາວ ເປັນເວທີສົ່ງເສີມການປຶກສາຫາລືລະຫວ່າງພາກລັດ-ເອກະຊົນ.** ໃນປີ 2005 ກອງປະຊຸມທຸລະກິດລາວ (LBF) ໄດ້ເປີດຂຶ້ນໂດຍແມ່ນຂໍ້ລິເລີ່ມຮ່ວມກັນລະຫວ່າງອົງການການເງິນສາກົນ (IFC) ແລະ ກະຊວງແຜນການ ແລະ ການລົງທຶນ. ໃນປີ 2015, MOIC ໄດ້ຮັບມອບໝາຍໃຫ້ເປັນຜູ້ປະສານງານກັບພາກລັດຖະບານ ເພື່ອເຊີນພາກສ່ວນກ່ຽວຂ້ອງເຂົ້າຮ່ວມ. LBF ໄດ້ຮັບການສະ ໜັບສະໜູນດ້ານວິຊາການຈາກໂຄງການສົ່ງເສີມຄວາມສາມາດໃນການແຂ່ງຂັນແລະການຄ້າ ທີ່ມີຜູ້ໃຫ້ທຶນຈາກຫລາຍຝ່າຍເພື່ອຈັດກອງປະຊຸມໂດຍການເປັນປະທານຮ່ວມຂອງລັດຖະມົນຕີອຸດສາຫະກຳ ແລະການຄ້າແລະຜູ້ປະສານງານຫລັກຂອງຜູ້ໃຫ້ທຶນແກ່ການຄ້າ (ເອກອັກຄະລັດຖະທູດ EU). LBF ຊຸກຍູ້ໃຫ້ມີການປຶກສາຫາລືຢ່າງຕັ້ງໜ້າ ລະຫວ່າງພາກລັດ ແລະ ເອກະຊົນ ໂດຍມີການເຂົ້າຮ່ວມຈາກສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ (LNCCI), ແລະ ສະມາຄົມທຸລະກິດອື່ນໆ.

127. **ແຜນພັດທະນາເສດຖະກິດ ແລະ ສັງຄົມແຫ່ງຊາດ ຄັ້ງທີ 8 (NSEDP) 2016-2020 ໄດ້ກຳນົດທິດຊີ້ນຳຕໍ່ຈຸດປະສົງຂອງນະໂຍບາຍການຄ້າ ແລະ ສິ່ງທີ່ຕິດພັນກັບການຄ້າຂອງ ສປປ ລາວ.** ໃນນັ້ນໄດ້ໃຫ້ຄຳໝັ້ນສັນຍາທີ່ຈະໃຫ້ເສດຖະກິດເຕີບໂຕຢ່າງທົ່ວເຖິງ ແລະ ຍືນຍົງ, ມີການປັບປຸງການຄຸ້ມຄອງໃຫ້ມີປະສິດທິຜົນ, ການນຳໃຊ້ຊັບພະຍາກອນທຳມະຊາດໃຫ້ມີປະສິດທິພາບ, ການຊຸກຍູ້ການເຕີບໂຕໃນຂົງເຂດທີ່ມີທ່າແຮງປຽບທຽບ ແລະ ການເຊື່ອມໂຍງຫຼາຍຝ່າຍແລະພາກພື້ນ. ລັດຖະບານໄດ້ໃຫ້ບູລິມະສິດການລົງທຶນໃນການພັດທະນາພື້ນຖານໂຄງລ່າງ, ການຂຸດຄົ້ນບໍ່ແຮ່ ແລະພະລັງງານໄຟຟ້ານ້ຳຕົກ. NSEDP ຄັ້ງທີ 9 ໃຫ້ບຸລິມະສິດການລົງທຶນທີ່ຈະສ້າງຄວາມຫຼາກຫຼາຍດ້ານເສດຖະກິດໃນຂົງເຂດກະສິກຳ ແລະ ທຸລະກິດການກະເສດ, ການທ່ອງທ່ຽວ ແລະ ອຸດສາຫະກຳປຸງແຕ່ງ.

128. **ຍຸດທະສາດການພັດທະນາເສດຖະກິດ-ສັງຄົມ 10 ປີ (2016-2025) ໄດ້ກຳນົດໃຫ້ເສດຖະກິດມີການເຕີບໂຕທີ່ສູງຂຶ້ນເປັນບູລິມະສິດອັນດັບໜຶ່ງ.** ຍຸດທະສາດດັ່ງກ່າວໄດ້ວາງເປົ້າໝາຍ ການເພີ່ມລາຍໄດ້ຕໍ່ຫົວຄົນໃຫ້ສູງກວ່າເກນປະເທດດ້ອຍພັດທະນາ ແລະ ໃຫ້ມີຄວາມຄືບໜ້າໃນການປະຕິບັດເປົ້າໝາຍ SDGs ໃນປີ 2020. ນະໂຍບາຍສະເພາະທີ່ພົວພັນກັບການຄ້າໄດ້ສຸມໃສ່ການຫຼຸດຕົ້ນທຶນການຄ້າ ແລະ ເພີ່ມຄວາມສາມາດໃນການແຂ່ງຂັນຂອງການສົ່ງອອກດ້ວຍການອຳນວຍຄວາມສະດວກທາງດ້ານການຄ້າ ແລະ ປັບປຸງສະພາບແວດລ້ອມແຫ່ງການດຳເນີນທຸລະກິດ ແລະ ການລົງທຶນ. ປັດຈຸບັນ ສປປ ລາວ ຄາດວ່າຈະຂ້າມຜ່ານໄປສູ່ສະຖານະພາບປະເທດທີ່ມີລາຍໄດ້ປານກາງຕ່ຳໃນປີ 2025.

## 4.1 ຕົ້ນທຶນການຄ້າ

129. **ຕົ້ນທຶນການຄ້າເຮັດໃຫ້ຕົ້ນທຶນໃນການນຳເຂົ້າ ແລະ ສົ່ງອອກສິນຄ້າແລະການບໍລິການລະຫວ່າງຊາຍແດນເພີ່ມຂຶ້ນ, ຈຳກັດການຂະຫຍາຍການຄ້າແລະ ເຮັດໃຫ້ເສດຖະກິດເຕີບໂຕຊ້າລົງ.** ການຄ້າເພີ່ມຂຶ້ນຈະຊຸກຍູ້ໃຫ້ເສດຖະກິດເຕີບໂຕ ແລະ ເພີ່ມລາຍໄດ້; ໂດຍສະເລ່ຍ ເງິນໜຶ່ງໂດລາທີ່ນຳໃຊ້ເພີ່ມຂຶ້ນໃນການຊື້ຂາຍ, ຄາດວ່າຈະນຳໄປສູ່ການສ້າງລາຍໄດ້ເພີ່ມຂຶ້ນ 20 ເຊັນ[19]. ການເພີ່ມການພົວພັນຮ່ວມມືກັບເສດຖະກິດໂລກໂດຍຜ່ານການຄ້າຈະເຮັດໃຫ້ເກີດການຖ່າຍທອດເຕັກໂນໂລຊີ, ການປັບປຸງຄຸນນະພາບສິນຄ້າໃຫ້ດີຂຶ້ນ ແລະ ການຫຼຸດຜ່ອນຄວາມທຸກຍາກ. ບັນດາເສດຖະກິດທີ່ເຊື່ອມໂຍງກັບຕ່ອງໂສ້ມູນຄ່າຂອງໂລກມີຄວາມສ່ຽງໜ້ອຍຕໍ່ຜົນກະທົບທາງລົບເມື່ອເສດຖະກິດພາຍໃນປະເທດຢູ່ໃນຂາລົງ, ເຖິງແມ່ນວ່າພວກເຂົາຍັງຄົງມີຄວາມອ່ອນໄຫວຕໍ່ກັບຜົນກະທົບຈາກພາຍນອກ. ພະຍາດລະບາດໃນທົ່ວໂລກໄດ້ເຮັດໃຫ້ເສດຖະກິດໂລກຖົດຖອຍໃນປີ 2020 ເນື່ອງຈາກການຄ້າຫຼຸດລົງ; ແນວໃດກໍ່ຕາມ, ນັບແຕ່ໄດ້ມີການສັກວັກຊິນຫລາຍຂຶ້ນ, ການຄ້າກໍໄດ້ເລີ່ມຟື້ນຕົວ. ພະຍາດລະບາດໄດ້ເຮັດໃຫ້ເກີດຄວາມບອບບາງໃນຕ່ອງໂສ້ການສະໜອງຂອງສາກົນ, ໄດ້ເລັ່ງການຫັນເປັນດີຈີຕອນແລະຊຸກຍູ້ໃຫ້ເກີດເຄືອຂ່າຍການຜະລິດພາຍໃນພາກພື້ນ. ທ່າອ່ຽງເຫຼົ່ານີ້ຂອງໂລກ ເປັນການສ້າງໂອກາດໃຫ້ຫຼາຍປະເທດທີ່ກຳລັງພັດທະນາ, ລວມທັງ ສປປ ລາວ, ເພື່ອດຶງດູດການລົງທຶນໃໝ່ໆທີ່ຊອກສະແຫວງຫາປະສິດທິພາບ, ດ້ວຍການເພີ່ມການເຊື່ອມໂຍງເຂົ້າກັບຕ່ອງໂສ້ມູນຄ່າຂອງພາກພື້ນ ແລະ ຂອງໂລກ. ການຈະຈັບກາລະໂອກາດເຫລົ່ານີ້ເພື່ອສ້າງປະໂຫຍດໃຫ້ປະເທດ, ຮຽກຮ້ອງໃຫ້ ສປປ ລາວ ດຳເນີນການຫຼຸດຜ່ອນຕົ້ນທຶນທາງການຄ້າ.

130. **ເມື່ອອັດຕາພາສີໄດ້ຫຼຸດລົງຢ່າງຫຼວງຫຼາຍ, ແມ່ນຈະເຫັນໄດ້ຊັດເຈນທີ່ສຸດໃນຂໍ້ມູນຕົ້ນທຶນການຄ້າ ວ່າຄ່າໃຊ້ຈ່າຍສິ້ນເປືອງທີ່ຍັງຄົງມີຢູ່ຫຼາຍນັ້ນ ໃນເວລານຳເຂົ້າ ແລະ ສົ່ງອອກສິນຄ້າ ແລະ ການບໍລິການ ແມ່ນຄ່າສິ້ນເປືອງອື່ນໆ.** ຕົ້ນທຶນການຄ້າໝາຍເຖິງຄ່າໃຊ້ຈ່າຍສິ້ນເປືອງທີ່ປະເທດຜະເຊີນໜ້າໃນເວລາທີ່ເຂົາເຈົ້າຄ້າຂາຍສິນຄ້າຫຼືການບໍລິການລະຫວ່າງຊາຍແດນ, ທຽບກັບການຊື້ຂາຍສິນຄ້າຫຼືການບໍລິການດຽວກັນໃນຕະຫຼາດພາຍໃນ. ໂດຍສະເລ່ຍ, ຕົ້ນທຶນການຄ້າຂອງສິນຄ້າ ເຮັດໃຫ້ລາຄາສິນຄ້າທີ່ຊື້ຂາຍໃນຕະຫຼາດສາກົນ ເພີ່ມຂຶ້ນເປັນສອງເທົ່າຕົວ ທຽບກັບ ລາຄາສິນຄ້າປະເພດດຽວກັນຢູ່ພາຍໃນປະເທດ, ເຊິ່ງສູງກວ່າຄ່າໃຊ້ຈ່າຍທາງດ້ານພາສີສະເລ່ຍ 7 ສ່ວນຮ້ອຍ. ການຄາດຄະເນທີ່ຜ່ານມາໂດຍ WTO (2019) ແລະອົງການອື່ນໆ ຊີ້ໃຫ້ເຫັນວ່າຕົ້ນທຶນການຄ້າຂອງການຄ້າການບໍລິການຍິ່ງສູງກວ່າຕົ້ນທຶນການຄ້າຂອງສິນຄ້າຢ່າງຫຼວງຫຼາຍ.

131. **ຕົ້ນທຶນການຄ້າແມ່ນສູງກວ່າອັດຕາພາສີຫຼາຍ ແລະ ຕົ້ນທຶນການຄ້າສິນຄ້າກະສິກຳກໍສູງກວ່າຂອງອຸດສາຫະກຳປຸງແຕ່ງຢ່າງຫຼວງຫຼາຍ.** ຕົ້ນທຶນການຄ້າຂອງ ສປປ ລາວ ກັບໄທ ແມ່ນ 46,9%, ກັບຫວຽດນາມແມ່ນ 52,1% ແລະ ກັບຈີນແມ່ນ 117,8%. ສັງເກດເຫັນວ່າ ຕົ້ນທຶນການຄ້າມີຄວາມແຕກຕ່າງກັນຢ່າງກວ້າງຂວາງໃນບັນດາປະເທດສະມາຊິກອາຊຽນ ແລະ ແມ່ນແຕ່ກັບບັນດາປະເທດເພື່ອນບ້ານໃກ້ຄຽງ. ຕົ້ນທຶນການຄ້າກັບກຳປູເຈຍຄາດຄະເນວ່າເກີນ 180 ສ່ວນຮ້ອຍ, ເກືອບເທົ່າກັບຕົ້ນທຶນການຄ້າຂອງສປປລາວກັບເຢຍລະມັນ. ອັນນີ້ຊີ້ໃຫ້ເຫັນວ່າເມື່ອຄ່າຂົນສົ່ງແຕກຕ່າງກັນ

19. ທະນາຄານໂລກ, 2020, ບົດລາຍງານການພັດທະນາໂລກ: ການຄ້າເພື່ອການພັດທະນາໃນຍຸກຂອງຕ່ອງໂສ້ມູນຄ່າໂລກ.

ອອກໄປຕາມໄລຍະທາງໃກ້ໄກຕາມເຂດພູມສາດແລະຍັງຄົງເປັນອົງປະກອບທີ່ສຳຄັນຂອງຕົ້ນທຶນການຄ້າ, ປັດໄຈອື່ນໆລວມທັງນະໂຍບາຍ, ລະບຽບການ, ຂັ້ນຕອນການບໍລິຫານ ແລະພື້ນຖານໂຄງລ່າງ ກໍຍັງເປັນສິ່ງທີ່ຕ້ອງໄດ້ພິຈາລະນາເຊັ່ນກັນ. ຕາຕະລາງ 4.9 ສະແດງໃຫ້ເຫັນຕົ້ນທຶນການຄ້າສະເລຍລວມຂອງ ສປປ ລາວ ກັບບາງປະເທດ. ເມື່ອຕົ້ນທຶນການຄ້າຖືກແຍກອອກ, ລະຫວ່າງສິນຄ້າກະສິກຳ ແລະ ອຸດສາຫະກຳປຸງແຕ່ງ, ເຫັນໄດ້ວ່າ, ສິນຄ້າກະສິກຳພົບບັນຫາອຸປະສັກທີ່ມີໄລຍະສຳຄັນ, ຄືມີຕົ້ນທຶນການຄ້າສູງກວ່າສອງເທົ່າໃນບັນດາປະເທດສ່ວນໃຫຍ່. ຕົ້ນທຶນດ້ານການຄ້າກະສິກຳກັບໄທແມ່ນຄາດຄະເນຢູ່ທີ່ 90 ສ່ວນຮ້ອຍ, ຈີນ 200 ສ່ວນຮ້ອຍ, ແລະ ຫວຽດນາມ ຫຼາຍກວ່າ 122 ສ່ວນຮ້ອຍ.

## ຮູບທີ 4.1 ຕົ້ນທຶນການຄ້າ ຂອງ ສປປ ລາວກັບບາງປະເທດ, 2018




*ໝາຍເຫດ: ຂໍ້ມູນຕົ້ນທຶນການຄ້າທັງໝົດນີ້ແມ່ນ ຂອງ 2018 ຍົກເວັ້ນແຕ່ ຂອງ ສປປ ລາວກັບສະຫະລັດອະເມລິກາ ແລະກັບຫວຽດນາມ ເຊິ່ງແມ່ນ ຂອງ 2017 ແລະ 2013 ຕາມລຳດັບ.*

*ແກນນອນແມ່ນຊື່ປະເທດ ຄືແຕ່ຊ້າຍໄປຂວາ ມີ: ອົດສະຕຣາລີ, ກຳປູເຈຍ, ຈີນ, ຝະຣັ່ງ, ເຢຍລະມັນ, ອິນເດຍ, ອິນໂດເນເຊຍ, ເກົາຫລີ, ມາເລເຊຍ, ສິງກະໂປ, ແອສປາຍ, ໄທ, ສະຫະລາຊະອານາຈັກອັງກິດ, ສະຫະລັດອະເມລິກາ ແລະ ຫວຽດນາມ*

*ແກນຕັ້ງແມ່ນ ອັດຕາສ່ວນຮ້ອຍ*

*ແຫລ່ງທີ່ມາ: ໄດ້ຈາກເວັບໄຊ https://www.unescap.org/resources/escap-world-bank-trade-cost-database*

132. **ໄດ້ຂະຫຍາຍການຄາດຄະເນຕົ້ນທຶນການຄ້າ ໄປໃຊ້ກັບການຄ້າການບໍລິການ ໂດຍໄດ້ກຳນົດເປັນອັດຕາສ່ວນຂອງຕົ້ນທຶນການຄ້າສາກົນກັບພາຍໃນປະເທດ ແລະ ໄດ້ກຳນົດປັດໄຈທີ່ປະກອບ ສ່ວນເຂົ້າໃນຕົ້ນທຶນການຄ້າ**[20]. ການຄາດຄະເນດັ່ງກ່າວແມ່ນອີງໃສ່ຂໍ້ມູນຈາກ 43 ປະເທດທີ່ລວມທັງບັນດາປະເທດທີ່ມີເສດຖະກິດຂະຫຍາຍຕົວແລ້ວ ແລະບັນດາເສດຖະກິດທີ່ເຕີບໂຕຂື້ນໃໝ່.[21] ສປປ ລາວ ບໍ່ໄດ້ຖືກບັນຈຸເຂົ້າໃນບັນຊີລາຍຊື່ບັນດາປະເທດ; ຢ່າງໃດກໍດີ, ພວກເຮົາມີເຫດຜົນທີ່ຈະສົມມຸດວ່າໂຄງປະກອບຕົ້ນທຶນການຄ້າທີ່ບັນດາປະເທດເສດຖະກິດເຕີບໂຕໃໝ່ກຳລັງຜະເຊີນຢູ່ນັ້ນກໍເປັນບັນຫາຂອງຜູ້ນຳເຂົ້າ ແລະ ຜູ້ສົ່ງອອກຂອງ ສປປ ລາວ ເຊັ່ນກັນ. ການວິເຄາະຂອງອົງການການຄ້າໂລກ (WTO) ພົບວ່າ ປີ 2017 ຕົ້ນທຶນດ້ານການຄ້າຂອງບັນດາປະເທດເສດຖະກິດທີ່ເຕີບໂຕໃໝ່ແມ່ນສູງກວ່າ 66 ສ່ວນຮ້ອຍ ທຽບກັບເສດຖະກິດທີ່ຂະຫຍາຍຕົວແລ້ວ; ສຳລັບທຸກໆປະເທດ, ຕົ້ນທຶນການຄ້າບໍລິການແມ່ນເກືອບສອງເທົ່າທຽບໃສ່ຕົ້ນທຶນການຄ້າສິນຄ້າ. ຕົ້ນທຶນການຄ້າແມ່ນແຕກຕ່າງກັນຢ່າງຫຼວງຫຼາຍໃນບັນດາຂະແໜງການບໍລິການຕ່າງໆ ແລະ ໃນອຸດສາຫະກຳປຸງແຕ່ງກໍແມ່ນສູງກວ່າຢູ່ໃນກະສິກຳ. ຂະແໜງການບໍລິການທີ່ມີຕົ້ນທຶນການຄ້າຕ່ຳລວມມີການຂົນສົ່ງ ແລະໂລຊິດສະຕິກ, ການຄ້າຂາຍຍົກ, ທຸລະກິດ ແລະ ການເຄື່ອນໄຫວວິຊາຊີບອື່ນໆ, ໄປສະນີ ແລະ ໂທລະຄົມມະນາຄົມ, ສື່ກາງດ້ານການເງິນ ແລະ ການບໍລິການສິ່ງແວດລ້ອມ, ວັດທະນະທຳ ແລະ ການບໍລິການສ່ວນບຸກຄົນ. ຂະແໜງການທີ່ມີຕົ້ນທຶນການຄ້າສູງສຸດລວມມີອະສັງຫາລິມະຊັບ, ການຄ້າຂາຍຍ່ອຍ, ການຂາຍລົດຍົນ ແລະ ການກໍ່ສ້າງ; ບັນດາຂະແໜງການທັງຫມົດເຫຼົ່ານີ້ສ່ວນຫລາຍແມ່ນຈະຜະລິດແລະບໍລິໂພກພາຍໃນປະເທດ. ການຂະຫຍາຍຕົວຂອງ ການຄ້າຜ່ານເອເລັກໂຕຣນິກມີຜົນຕໍ່ການຫລຸດຜ່ອນຕົ້ນທຶນການຄ້າໃນຂະແໜງການຂາຍ ຍ່ອຍ.

133. **ຕົ້ນທຶນການຄ້າກີດກັນການເປີດກວ້າງການຄ້າຂອງ ສປປ ລາວ ແລະ ຈຳກັດການມີສ່ວນຮ່ວມໃນລະບົບຕ່ອງໂສ້ມູນຄ່າຂອງໂລກ (GVC).** ຕົ້ນທຶນການຄ້າລວມມີຄ່າຂົນສົ່ງ, ຄ່າໃຊ້ຈ່າຍສິ້ນເປືອງທີ່ເກີດຂື້ນຢູ່ເຂດຊາຍແດນ ແລະ ການ

20. ຈົ່ງເບິ່ງ WTO (2019). https://www.wto.org/english/res_e/booksp_e/05_wtr19_4_e.pdf
21. ວິທີວິທະຍາລະອຽດ ແລະແຫຼ່ງຂໍ້ມູນແມ່ນສະແດງຢູ່ໃນ WTO (2019) ເອກະສານຊ້ອນທ້າຍ D.1. ສປປ ລາວ ບໍ່ໄດ້ລວມຢູ່ໃນຂໍ້ມູນປະເທດ.

ນໍາໃຊ້ພື້ນຖານໂຄງລ່າງ, ຂໍ້ມູນຂ່າວສານ ແລະ ຄ່າສິ້ນເປືອງໃນການເຄື່ອນໄຫວທຸລະກໍາ, ສິ່ງກີດກັ້ນທາງການຄ້າ ແລະ ບັນຫາລະບຽບການ, ແລະ ຄຸນນະພາບການຄຸ້ມຄອງ. ຕົ້ນທຶນການຄ້າອາດຈະຖືກຈັດແບ່ງອອກເປັນຫ້າອົງປະກອບຄື: ຄ່າຂົນສົ່ງ, ຄ່າໃຊ້ຈ່າຍດ້ານຂໍ້ມູນແລະດ້ານທຸລະກໍາ (ລວມທັງເຕັກໂນໂລຊີຂໍ້ມູນຂ່າວສານ), ນະໂຍບາຍການຄ້າແລະຄວາມແຕກຕ່າງດ້ານລະບຽບການ (ລະຫວ່າງຄູ່ຄ້າສອງຝ່າຍ) ແລະ ຄຸນນະພາບການຄຸ້ມຄອງ. WTO ໄດ້ຄາດຄະເນສ່ວນແບ່ງຂອງແຕ່ລະອົງປະກອບຫ້າຢ່າງທີ່ມີໃນຕົ້ນທຶນການຄ້າ. ຕົວແບບທີ່ສ້າງຂຶ້ນມາພົບວ່າປັດໃຈ ທີ່ກ່ຽວຂ້ອງກັບນະໂຍບາຍກວມເອົາສ່ວນທີ່ສໍາຄັນ ຂອງຕົ້ນທຶນການຄ້າ. ຄຽງຄູ່ກັບບັນດາມາດຕະການທີ່ກ່ຽວຂ້ອງກັບນະໂຍບາຍ, ການອໍານວຍຄວາມສະດວກດ້ານການຄ້າສາມາດກວມເອົາ 1/3 ຂອງຕົ້ນທຶນການຄ້າທັງໝົດ; ໃນນີ້ລວມມີຄ່າໃຊ້ຈ່າຍສິ້ນເປືອງທັງໝົດຢູ່ຊາຍແດນທີ່ກ່ຽວຂ້ອງກັບການແຈ້ງພາສີ ແລະ ຮັບປະກັນການປະຕິບັດຕາມລະບຽບການ. ຄ່າຂົນສົ່ງແລະຄ່າເດີນທາງແມ່ນຄາດຄະເນໂດຍອີງໃສ່ໄລຍະທາງທາງພູມສາດແລະຄຸນນະພາບຂອງພື້ນຖານໂຄງລ່າງ ຂອງການຂົນສົ່ງ; ສິ່ງເຫຼົ່ານີ້ກວມເອົາເກືອບ 30 ສ່ວນຮ້ອຍຂອງຕົ້ນທຶນການຄ້າທັງໝົດ.

**ຮູບທີ 4.2 ແຍກໂຄງປະກອບຂອງຕົ້ນທຶນການຄ້າຂອງການຄ້າສິນຄ້າ ແລະ ການຄ້າບໍລິການ**




*ແຫລ່ງທີ່ມາ: Gillson Ian ແລະ ຄະນະຊ່ຽວຊານ (2020).*

## 4.2 ຕາຕະລາງອັດຕາພາສີ ແລະ ນະໂຍບາຍການຄ້າ

134. **ສປປ ລາວ ມີຕາຕະລາງ ອັດຕາພາສີ ທີ່ຈັດໄວ້ໃນຫຼາຍແຖບທີ່ຂ້ອນຂ້າງສັບສົນ.** ຕາຕະລາງອັດຕາພາສີຂອງ ສປປ ລາວ ປີ 2018 ມີ 11.514 ສິນຄ້າຕາມລາຍການອັດຕາພາສີ ລະຫັດສິບຕົວເລກ. ອັດຕາພາສີໄດ້ຖືກຈັດເປັນໝວດໂດຍໃຊ້ລະບົບສາລະບານເອກະພາບ (HS2017), ເຊິ່ງໄດ້ໃຊ້ມາດຕະ ຖານໃນລະດັບ 6 ຕົວເລກ ແລະ ທັງຫມົດມີປະມານ 5.300 ລາຍການສິນຄ້າ. ອັນນີ້ໝາຍຄວາມວ່າ ທີ່ເປັນອັນສະເພາະ ຂອງ ສປປ ລາວ ແມ່ນມີ 6.000 ກວ່າລາຍການສິນຄ້າ. ອັດຕາພາສີ MFN ທີ່ໃຊ້ຕົວຈິງມີ 11 ອັດຕາພາສີທີ່ແຕກຕ່າງກັນຕັ້ງແຕ່ສູນຫາ 40 ສ່ວນຮ້ອຍ. ໃນລະຫວ່າງປີ 2014 ຫາ 2018 ສປປ ລາວ ໄດ້ສ້າງອັດຕາພາສີໃໝ່ເກືອບ 2.000 ລາຍການສິນຄ້າ ໂດຍຫັນປ່ຽນຈາກການຈັດປະເພດອັດຕາພາສີ ຕາມ 8 ຕົວເລກ ທີ່ມີ 9.558 ລາຍການສິນຄ້າ ແລະ ຫຼາຍກວ່າເຄິ່ງໜຶ່ງ ໜ້ອຍໜຶ່ງຂອງລາຍການສິນຄ້າໃໝ່ (1,025) ແມ່ນມີອັດຕາພາສີ ເທົ່າສູນ. ການສ້າງລາຍການສິນຄ້າ 1.025 ຊະນິດທີ່ເສຍພາສີສູນເຮັດໃຫ້ອັດຕາພາສີສະເລ່ຍແບບງ່າຍດາຍ(ບໍ່ໄດ້ມີການຖ່ວງນໍ້າໜັກໃສ່ມູນຄ່າສິນຄ້າ) ຫຼຸດລົງ ຈາກ 10,7 ສ່ວນຮ້ອຍໃນປີ 2014 ເປັນ 8,6 ສ່ວນຮ້ອຍໃນປີ 2018. ຫຼາຍກວ່າ 80 ສ່ວນຮ້ອຍຂອງອັດຕາພາສີທີ່ນໍາໃຊ້ແມ່ນຢູ່ລະຫວ່າງສູນ ແລະ 10 ສ່ວນຮ້ອຍ.

135. **ການມີສິນຄ້າຕາມລະຫັດຍ່ອຍຢ່າງຫລວງຫຼາຍ ໃນສາລະບານອັດຕາພາສີ ເຮັດໃຫ້ເປັນພາລະທາງດ້ານການບໍລິຫານ. ການຕິກລົງສ້າງລະຫັດຍ່ອຍ 8 ຕົວເລກເພີ່ມເຕີມໃນສາລະບານອັດຕາພາສີ, ແທນທີ່ຈະພຽງແຕ່ເປັນການກໍານົດເພີ່ມລາຍການສິນຄ້າທີ່ເສຍພາສີໃນອັດຕາສູນໃສ່ການຈັດລະຫັດຍ່ອຍຂອງສິນ ຄ້າໃນສາລະບານອັດຕາພາສີທີ່ມີມາກ່ອນແລ້ວ, ຊໍ້າໄປເພີ່ມພາລະດ້ານບໍລິຫານໃນການຈັດລະຫັດຍ່ອຍຂອງສິນຄ້າ ຂອງຜູ້ຄ້າຂາຍ ແລະ ເຈົ້າໜ້າທີ່ພາສີ.** ນອກຈາກນັ້ນ, ການປ່ຽນແປງອັດຕາພາສີຫລາຍພາຍໃນຜະລິດຕະພັນສິນຄ້າທີ່ກໍານົດໃນຂອບທີ່ແຄບສ້າງສິ່ງກະຕຸກຊຸກຍູ້ໃຫ້ມີການຈັດສິນຄ້າຕາມລະຫັດຍ່ອຍທີ່ບໍ່ຖືກຕ້ອງໄປໃສ່ຢູ່ໃນແຖບຕໍ່າແລະເຮັດໃຫ້ມີການເລືອກປະຕິບັດດ້ານອັດຕາພາສີສໍາລັບຜູ້ໃຊ້ສຸດທ້າຍ. ການເລືອກປະຕິບັດສໍາລັບຜູ້ໃຊ້ສຸດທ້າຍແມ່ນປາກົດຂຶ້ນ ເມື່ອອັດຕາພາສີຂອງ

ຜະລິດຕະພັນສິນຄ້າຄືກັນ ມີຄວາມແຕກຕ່າງກັນໄປ ຕາມການແຈ້ງຂອງຜູ້ນໍາເຂົ້າກ່ຽວກັບເປົ້າໝາຍການນໍາໃຊ້ສຸດທ້າຍ. ຕົວຢ່າງ, ເມື່ອ ໂຮງງານຜະລິດເຄື່ອງຕັດຫຍິບນໍາເຂົ້າເຄື່ອງຈັກຕັດຫຍິບ, ອັດຕາພາສີຈະເປັນສູນ, ແຕ່ເມື່ອບຸກຄົນເປັນຜູ້ນໍາເຂົ້າ, ແມ່ນຈະນໍາໃຊ້ອັດຕາພາສີເປັນບວກ. ການເກັບພາສີທີ່ແຕກຕ່າງກັນຕາມຜູ້ໃຊ້ເປັນການຈໍາແນກຢ່າງມີຜົນຕໍ່ວິສາຫະກິດຂະໜາດນ້ອຍແລະຂະໜາດກາງແລະຈຸນລະວິສາຫະກິດທີ່ແມ່ຍິງເປັນເຈົ້າຂອງ.

## ຕາຕະລາງທີ 4.2 ຕາຕະລາງລາຍການສິນຄ້າຕາມລະຫັດຍ່ອຍ 8 ຕົວເລກ ໃນສາລະບານເອກະພາບຂອງ ສປປ ລາວ ປີ 2018

| ຈໍານວນພາກ/ແຖບອັດຕາພາສີ | ອັດຕາພາສີ | ຈໍານວນລາຍການສິນຄ້າລະຫັດຍ່ອຍ | ຄິດໄລ່ເປັນສ່ວນຮ້ອຍຂອງຈໍານວນລວມ |
|---|---|---|---|
| 1 | 0,0 | 420 | 4,27 |
| 2 | 1,0 | 30 | 0,31 |
| 3 | 5,0 | 4.884 | 49,69 |
| 4 | 5,1 | 26 | 0,26 |
| 5 | 6,5 | 30 | 0,31 |
| 6 | 10,0 | 3.367 | 34,26 |
| 7 | 15,0 | 43 | 0,44 |
| 8 | 20,0 | 592 | 6,02 |
| 9 | 25,0 | 9 | 0,09 |
| 10 | 30,0 | 246 | 2,50 |
| 11 | 40,0 | 167 | 1,70 |
| ວ່າງເປົ່າ | ບໍ່ມີອັດຕາ | 14 | 0,14 |

*ໝາຍເຫດ: ອັດຕາທີ່ຂາດຫາຍແມ່ນສໍາລັບ 14 ຜະລິດຕະພັນສິນຄ້າທີ່ເກືອດຫ້າມ (ເຊັ່ນ, ຝິ່ນ, ໃບໂຄຄາມີສານໂຄເຄນ, ອໍາເຟຕາມີນ)*

*ແຫລ່ງທີ່ມາ: ໄດ້ຈາກສູນສອບຖາມຂໍ້ມູນການຄ້າສາກົນ ຂອງທະນາຄານໂລກຮ່ວມກັບອີງການກ່ຽວຂ້ອງອື່ນໆ WITS (World Integrated Trade Solutions)*

136. **ການມີຫຼາຍແຖບອັດຕາພາສີ ແລະອັດຕາພາສີທີ່ບໍ່ກຸ້ມຄ່າໃນການຈັດເກັບ ຈໍາເປັນຕ້ອງໄດ້ປັບປຸງໃຫ້ກະທັດຮັດຕື່ມ.** ຕາຕະລາງ 4.2 ແລະ 4.3 ແມ່ນອີງໃສ່ຂໍ້ມູນອັດຕາພາສີຕາມລະບົບເອກະພາບ HS 8 ຕົວເລກ. ສປປ ລາວ ມີແຖບອັດຕາພາສີຫຼາຍເກີນໄປ ແລະ ອັດຕາພາສີພາຍໃນຂະແໜງການຕ່າງໆ ກໍມີການປ່ຽນແປງຢ່າງຫຼວງຫຼາຍ, ເຖິງແມ່ນວາຈະຫຼຸດລົງໃນທົດສະວັດທີ່ຜ່ານມາ. ການປ່ຽນແປງທີ່ມີຄວາມສໍາຄັນໃນອັດຕາພາສີຕາມແຕລະສາຍຜະລິດຕະພັນ, ໂດຍສະເພາະລະຫວ່າງຜະລິດຕະພັນທີ່ສາມາດທົດແທນກັນໄດ້, ຈະບິດເບືອນຄວາມຕ້ອງການ. ໂຄງປະກອບອັດຕາພາສີຂອງເສດຖະກິດການຄ້າເສລີທີ່ມີການຂະຫຍາຍຕົວໄວ ມີຄຸນລັກສະນະດັ່ງຕໍ່ໄປນີ້: 3 ຫຼື 4 ແຖບອັດຕາພາສີລວມທັງສູນ, ບໍ່ມີອັດຕາພາສີທີ່ບໍ່ກຸ້ມຄ່າໃນການຈັດເກັບ (ອັດຕາພາສີທີ່ເພີ່ມຕົ້ນທຶນການຄ້າແລະສ້າງລາຍຮັບໜ້ອຍ), ຄວາມແຕກຕ່າງທີ່ຊັດເຈນລະຫວ່າງແຖບອັດຕາພາສີ, ການປ່ຽນແປງໜ້ອຍຕາມໝວດສິນຄ້າທີ່ຈັດຕາມຂະແໜງຍ່ອຍໃນແງເສດຖະກິດ ແລະ ອັດຕາພາສີສູງສຸດພາຍໃນແລະຕ່າງປະເທດບໍ່ຫລາຍເພື່ອຈໍາກັດຜົນກະທົບຂອງອັດ ຕາພາສີແບບລົດລັ່ນຄືຂັ້ນໄດ(ຄືເກັບໃນທຸກຂອດ).

## ຕາຕະລາງ 4.3 ຈໍານວນລາຍການສິນຄ້າຕາມລະຫັດພາສີຍ່ອຍ 8 ຕົວເລກ ແບ່ງຕາມຂະແໜງ ແລະ ອັດຕາພາສີ MFN ສະເລ່ຍຄາດຄະເນ

| ລະຫັດລະບົບເອກະພາບ | ຂະແໜງ | ຈໍານວນລາຍການສິນຄ້າຕາມລະຫັດພາສີຍ່ອຍ | ອັດຕາພາສີສະເລ່ຍ(ສ່ວນຮ້ອຍ) |
|---|---|---|---|
| 01-05 | ສັດ | 37 | 10,6 |
| 06-15 | ພືດຜັກ | 1.114 | 8,8 |
| 16-24 | ສະບຽງອາຫານ | 443 | 8,2 |
| 25-27 | ແຮ່ທາດ/ພະລັງງານໄຟຟ້າ | 204 | 19,5 |
| 28-38 | ຜະລິດຕະພັນເຄມີ | 1.157 | 14,6 |
| 39-40 | ປະລັດສະຕິກ/ຢາງ | 480 | 11,6 |

| | | | |
|---|---|---|---|
| 41-43 | ໜັງສັດໃຫຍ່/ສັດນ້ອຍ | 100 | 6,4 |
| 44-49 | ໄມ້ | 426 | 8,4 |
| 50-63 | ແຜນແພ/ເຄື່ອງນຸ່ງຫົ່ມ | 1.079 | 10,7 |
| 64-67 | ເກີບ | 74 | 8,9 |
| 68-71 | ຫີນ/ແກ້ວ | 296 | 17,4 |
| 72-83 | ໂລຫະ | 909 | 15,8 |
| 84-85 | ເຄື່ອງກົນຈັກ/ເຄື່ອງໄຟຟ້າ | 2.067 | 13,7 |
| 86-89 | ການຂົນສົ່ງ | 835 | 10,8 |
| 90-97 | ລາຍການອື່ນໆ | 607 | 10,2 |
| | ລວມຍອດ/ຄ່າສະເລ່ຍ | 9.828 | 8,70 |

*ແຫລ່ງທີ່ມາ: ໄດ້ຈາກສູນສອບຖາມຂໍ້ມູນການຄ້າສາກົນ ຂອງທະນາຄານໂລກຮ່ວມກັບອົງການກ່ຽວຂ້ອງອື່ນໆ WITS*

## ຮູບທີ 4.3 ໂຄງປະກອບອັດຕາພາສີ MFN ຂອງ ສປປ ລາວ




*ແຫລ່ງທີ່ມາ: ໄດ້ຈາກສູນສອບຖາມຂໍ້ມູນການຄ້າສາກົນ ຂອງທະນາຄານໂລກຮ່ວມກັບອົງການກ່ຽວຂ້ອງອື່ນໆ WITS*

*ໝາຍເຫດ: ທ່ອນສີສົ້ມແມ່ນ ແຖບອັດຕາພາສີ, ເສັ້ນສີຟ້າລາຍການສິນຄ້າລະຫັດພາສີຍ່ອຍ;*

### ຮູບທີ 4.4 ຈຳນວນລາຍການສິນຄ້າຕາມລະຫັດພາສີຍ່ອຍ ແບ່ງຕາມຂະແໜງ ແລະ ອັດຕາພາສີ MFN ສະເລ່ຍຄາດຄະເນລ່ວງໜ້າ




*ແຫລ່ງທີ່ມາ: ໄດ້ຈາກສູນສອບຖາມຂໍ້ມູນການຄ້າສາກົນ ຂອງທະນາຄານໂລກຮ່ວມກັບອົງການກ່ຽວຂ້ອງອື່ນໆ WITS*

### ຮູບທີ 4.5 ອັດຕາພາສີ MFN ຄາດຄະເນລ່ວງໜ້າ ຂອງ ສປປ ລາວ ໃນການນຳເຂົ້າ ແລະ ການສົ່ງອອກ, 2019




*ແຫລ່ງທີ່ມາ: ໄດ້ຈາກສູນສອບຖາມຂໍ້ມູນການຄ້າສາກົນ ຂອງທະນາຄານໂລກຮ່ວມກັບອົງການກ່ຽວຂ້ອງອື່ນໆ WITS. https://wits.worldbank.org/*

137. **ຕາຕະລາງອັດຕາພາສີຂອງ ສປປ ລາວ ມີການຂຶ້ນອັດຕາພາສີແບບປະສົມກັນ(ເກັບຕາມອັດຕາສ່ວນຮ້ອຍຂອງມູນຄ່າສິນຄ້າແລະຕາມໜ່ວຍ/ບໍລິມາດສິນຄ້ານຳເຂົ້າມາລວມກັນ) ຕາມຂັ້ນຕອນການຜະລິດ.** ການທົບທວນນະໂຍບາຍການຄ້າຂອງ WTO (2020), ເຊິ່ງໄດ້ຈັດປະເພດອັດຕາພາສີໂດຍອີງໃສ່ການຈັດປະເພດ ຕາມລະຫັດ ISIC (ການຈັດໝວດກິດຈະກຳທາງເສດຖະກິດທັງໝົດແບບມາດ ຕະຖານອຸດສາຫະກຳສາກົນ), ໄດ້ລາຍງານວ່າອັດຕາພາສີສະເລ່ຍສຳລັບ ວັດຖຸດິບ ແມ່ນເທົ່າກັບ 10,7 ສ່ວນຮ້ອຍ, ສິນຄ້າເຄິ່ງສຳເລັດຮູບ ມີອັດຕາຕ່ຳກວ່າເທົ່າກັບ 7,5 ສ່ວນຮ້ອຍ ແລະ ສິນຄ້າສຳເລັດຮູບມີອັດຕາທີ່ສູງກວ່າ ຄືເທົ່າກັບ 8,7 ສ່ວນຮ້ອຍ. ເມື່ອລາຍການສິນຄ້າຕາມລະຫັດພາສີຍ່ອຍ ຖືກຈັດເປັນກຸ່ມໂດຍໃຊ້ລະຫັດຂອງລະບົບເອກະພາບ HS ເຊິ່ງຈັດໃນຂະແໜງການໃຫຍ່ທີ່ກວມຫລາຍລາຍການ, ບັນດາແຮ່ທາດ, ຫີນ / ແກ້ວຈະມີອັດຕາພາສີສະເລ່ຍສູງທີ່ສຸດ.

138. **ການເຮັດໃຫ້ຂອບເຂດອັດຕາພາສີງ່າຍຂຶ້ນ. ຈາກການວິເຄາະໂຄງປະກອບອັດຕາພາສີຂອງ ສປປ ລາວ ທີ່ສະແດງຢູ່ລຸ່ມນີ້ເຫັນວ່າຂອບເຂດໂຄງປະກອບອັດຕາພາສີສາມາດເຮັດໃຫ້ງ່າຍຂຶ້ນໄດ້.** ການປະຕິຮູບທີ່ເປັນໄປໄດ້ລວມມີການຫຼຸດຜ່ອນຈຳນວນແຖບອັດຕາພາສີໂດຍການລຶບລ້າງແຖບ 1 ສ່ວນຮ້ອຍ, ຫຼຸດແຖບ 5,1 ແລະ 6,5 ສ່ວນຮ້ອຍລົງເປັນ 5 ສ່ວນຮ້ອຍຫຼືແມ້ກະທັ້ງຫຼຸດເປັນສູນ. ຄວນພິຈາລະນາລຶບລ້າງແຖບອັດຕາພາສີ 15 ແລະ 25 ສ່ວນຮ້ອຍໂດຍການຍ້າຍທັງສອງໄປຢູ່ໃນແຖບອັດຕາພາສີທີ່ຕ່ຳກວ່າ ເຊັ່ນກັນ ເພື່ອໃຫ້ອັດຕາພາສີມີຄວາມງ່າຍຂຶ້ນ.

139. **ການນຳເຂົ້າຂອງ ສປປ ລາວ ມີການນຳໃຊ້ອັດຕາພາສີ MFN ໃນຊັດສ່ວນທີ່ຂ້ອນຂ້າງໜ້ອຍ.** ການນຳເຂົ້າສ່ວນໃຫຍ່ຈາກບັນດາປະເທດບ້ານໃກ້ເຮືອນຄຽງມີເງື່ອນໄຂໄດ້ຮັບສິດທິພິເສດທາງດ້ານພາສີຕາມສັນຍາການຄ້າສິນຄ້າອາຊຽນ (ATIGA) ແລະ ສັນຍາການຄ້າເສລີສອງຝ່າຍຫຼາຍສະບັບ. ພາຍໃຕ້ ATIGA, ອັດຕາພາສີສະເລ່ຍແມ່ນ 0,2 ສ່ວນຮ້ອຍ ແລະ ຫຼາຍກວ່າ 95 ສ່ວນຮ້ອຍ ຂອງລາຍການສິນຄ້າຕາມລະຫັດພາສີຍ່ອຍແມ່ນໄດ້ຫລຸດລົງເປັນສູນແລ້ວ. 98 ສ່ວນຮ້ອຍ ຂອງ ບັນດາລາຍການສິນຄ້າຕາມລະຫັດພາສີຍ່ອຍທັງໝົດພາຍໃຕ້ສັນຍາການຄ້າເສລີ FTA ສອງຝ່າຍກັບຫວຽດນາມ ຖືວ່າບໍ່ເກັບພາສີ.

140. **ລາຍຮັບພາສີບໍ່ແມ່ນແຫຼ່ງລາຍຮັບທີ່ສຳຄັນສຸດຂອງລັດຖະບານ.** ລາຍຮັບພາສີໄດ້ຫຼຸດຄວາມສຳຄັນລົງໃນແຫຼ່ງລາຍຮັບພາສີ-ອາກອນທັງໝົດໃນໄລຍະ 5 ປີທີ່ຜ່ານມາ. ໃນປີ 2018, ມູນຄ່າພາສີນຳເຂົ້າຈາກການເກັບພາສີກວມເອົາ 6,2 ສ່ວນຮ້ອຍຂອງລາຍຮັບພາສີ-ອາກອນທັງໝົດຂອງລັດຖະບານ, ໃນຂະນະທີ່ອາກອນຊົມໃຊ້ແລະອາກອນມູນຄ່າເພີ່ມກວມເອົາຫຼາຍກວ່າເຄິ່ງໜຶ່ງ (58,5 ສ່ວນຮ້ອຍ) ຂອງຈຳນວນ ລວມ.

141. **ການຫຼຸດພາສີນຳເຂົ້າ. ພາຍໃຕ້ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ແລະ ດຳລັດວ່າດ້ວຍເຂດເສດຖະກິດພິເສດ (2018) ຂອງ ສປປ ລາວ ຖືວ່າການນຳເຂົ້າໃນເປົ້າໝາຍດັ່ງກ່າວແມ່ນບໍ່ເສຍພາສີ ແລະ ອາກອນມູນຄ່າເພີ່ມ.** ການນຳເຂົ້າວັດສະດຸ, ອຸປະກອນ ແລະ ພາຫະນະ, ບໍ່ໄດ້ຜະລິດຢູ່ໃນ ສປປ ລາວ ແຕ່ມີຄວາມຈຳເປັນສຳລັບກິດຈະກຳການຜະລິດທີ່ໄດ້ຮັບການອະນຸມັດ, ແມ່ນຍົກເວັ້ນທັງພາສີນຳເຂົ້າ ແລະອາກອນມູນຄ່າເພີ່ມ. ການນຳເຂົ້າວັດຖຸດິບ, ອຸປະກອນ ແລະ ຊິ້ນສ່ວນທີ່ນຳໃຊ້ເຂົ້າໃນການຜະລິດເພື່ອສົ່ງອອກ, ຍັງໄດ້ຍົກເວັ້ນພາສີຂາເຂົ້າ ແລະ ສົ່ງອອກ ແລະ ອາກອນມູນຄ່າເພີ່ມ. ວັດສະດຸຊື້ຈາກແຫລ່ງພາຍໃນປະເທດ ທີ່ໃຊ້ເພື່ອຜະລິດຜະລິດຕະພັນສິນຄ້າເຄິ່ງສຳເລັດຮູບ ແລະ ສຳເລັດຮູບແມ່ນໄດ້ຮັບການຍົກເວັ້ນອາກອນມູນຄ່າເພີ່ມ.

## 4.3 ບັນດາມາດຕະການກີດກັນການຄ້າທີ່ບໍ່ແມ່ນພາສີ

142. **ມາດຕະການທີ່ບໍ່ແມ່ນພາສີເຮັດໃຫ້ຕົ້ນທຶນການຄ້າເພີ່ມຂຶ້ນຫຼາຍກວ່າຄ່າພາສີ.** ດ້ວຍການຫຼຸດອັດຕາພາສີ, ໃນ ສປປ ລາວ ແລະ ທົ່ວໂລກ, ມາດຕະການທີ່ບໍ່ແມ່ນພາສີ (NTMs) ແມ່ນນັບມື້ນັບເປັນສາເຫດຫຼັກທີ່ເຮັດໃຫ້ຕົ້ນທຶນການຄ້າສູງ. ສິ່ງທີ່ພົ້ນເດັ່ນຂອງ NTMs ໄດ້ຊີ້ໃຫ້ເຫັນເຖິງຜົນກະທົບຕໍ່ການເພີ່ມຕົ້ນທຶນຄ່າໃຊ້ຈ່າຍຂອງການປະຕິບັດຕາມຂໍ້ກຳນົດກົດລະບຽບແລະລະບຽບວິທີປະຕິບັດດ້ານບໍລິຫານຂອງລັດ. NTM ແມ່ນມາດຕະການໃດໜຶ່ງທີ່ນອກເໜືອໄປຈາກອັດຕາພາສີທີ່ອາດຈະສົ່ງຜົນກະທົບທາງເສດຖະກິດຕໍ່ການຄ້າ. ສິ່ງເຫຼົ່ານີ້ລວມມີລະບຽບການທີ່ແນໃສ່ຮັບປະກັນຄວາມປອດໄພຂອງຜູ້ຊົມໃຊ້, ສຸຂະພາບ, ການປົກປ້ອງສິ່ງແວດລ້ອມແລະຈຸດປະສົງນະໂຍບາຍສາທາລະນະອື່ນໆເຊິ່ງເປັນທີ່ຕ້ອງການແລະອະນຸຍາດໃຫ້ໃຊ້ໄດ້ ພາຍໃຕ້ WTO ແລະ ທຸກໆສັນຍາລະດັບພາກພື້ນ, ໂດຍໃຫ້ມີການນຳໃຊ້ຢ່າງເທົ່າທຽມກັນລະຫວ່າງຜະລິດຕະພັນສິນຄ້າພາຍໃນ ແລະ ສິນຄ້ານຳເຂົ້າ, ເຊິ່ງໄດ້ຖືກອອກແບບມາເພື່ອຫຼຸດຜ່ອນຜົນກະທົບດ້ານການຄ້າ ແລະ ໃນກໍລະນີຂອງມາດຕະການສຸຂະອະນາໄມ ແລະສຸຂະອະນາໄມພືດ ແມ່ນໃຫ້ອີງໃສ່ພື້ນຖານຄວາມຮູ້ດ້ານວິທະຍາສາດ.

143. **ສິ່ງກີດກັນການຄ້າທີ່ບໍ່ແມ່ນພາສີ (NTB) ຫມາຍເຖິງ ມາດຕະການກີດກັນການຄ້າທີ່ບໍ່ແມ່ນພາສີ NTM ທີ່ມີຜົນກະທົບທາງລົບຕໍ່ການຄ້າ.** ອັນນີ້ອາດຈະເປັນຜົນມາຈາກມາດຕະການທີ່ມີຜົນກະທົບທີ່ແຕກຕ່າງກັນຕໍ່ຜູ້ນຳເຂົ້າທຽບກັບຜູ້ຜະລິດພາຍໃນ ແລະຈາກອຸປະສັກທາງຂັ້ນຕອນທີ່ມາຈາກສະພາບແວດລ້ອມທີ່ເອື້ອອຳນວຍແກ່ການດຳເນີນທຸລະກິດແລະລັກສະນະການຈັດການຄຸ້ມຄອງ-ບໍລິຫານແລະການຈັດການ ຈັດຕັ້ງທີ່ມີຢູ່ແລ້ວ. ເຈດຕະນາຂອງລະບຽບການອາດຈະຖືກຕ້ອງຕາມກົດໝາຍເພື່ອແນໃສ່ໃຫ້ມີຄວາມປອດໄພຂອງຜູ້ຊົມໃຊ້; ເຖິງຢ່າງໃດກໍຕາມ, ວິທີການຈັດຕັ້ງປະຕິບັດມາດຕະການດັ່ງກ່າວ ອາດຈະສົ່ງຜົນກະທົບໂດຍບໍ່ໄດ້ຕັ້ງໃຈ ແລະ ສົ່ງຜົນກະທົບໃນທາງກົງກັນຂ້າມຕໍ່ຜູ້ສົ່ງອອກທີ່ມີທ່າແຮງບົ່ມຊ້ອນໂດຍການວາງໃຫ້ເສຍຄ່າໃຊ້ຈ່າຍສູງກ່ອນຈະເຂົ້າຕະຫຼາດໄດ້ ເຊິ່ງອາດເປັນການກີດກັນສຳລັບຜູ້ປະກອບການຂະໜາດນ້ອຍ ແລະ ກາງ.

144. **ໃນ ສປປ ລາວ, ຫຼາຍກະຊວງມີສ່ວນຮ່ວມໃນການສ້າງ ແລະ ຈັດຕັ້ງປະຕິບັດ NTM ທີ່ອາດຈະສົ່ງຜົນກະທົບທາງດ້ານການຄ້າ.** ໃນນັ້ນ, ລວມມີ 14 ອົງການຈັດຕັ້ງລັດຖະບານທີ່ອອກລະບຽບ ລວມມີ: ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ກະຊວງກະສິກຳ ແລະ ປ່າໄມ້, ກະຊວງສາທາລະນະສຸກ, ກະຊວງອຸດສາຫະກຳ ແລະ ການຄ້າ ແລະ ກະຊວງການເງິນ. ຈຳນວນຂອງ NTMs ທີ່ໄດ້ກຳນົດອອກໂດຍອົງການຂອງລັດຖະບານ ສປປ ລາວ ແມ່ນສະແດງຢູ່ໃນຕາຕະລາງ 4.4 ຂ້າງລຸ່ມນີ້.

### ຕາຕະລາງ 4.4 ມາດຕະການກີດກັນການຄ້າທີ່ບໍ່ແມ່ນພາສີ ແຍກຕາມອົງການຈັດຕັ້ງທີ່ອອກມາດຕະການ

| ເລກລຳດັບ | ອົງການຈັດຕັ້ງລັດຖະບານທີ່ອອກມາດຕະການ | ຈຳນວນ NTMs | ສ່ວນແບ່ງ ຂອງ NTMs (ສ່ວນຮ້ອຍ) |
|---|---|---|---|
| 1 | ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ | 55 | 18,3 |
| 2 | ກະຊວງສາທາລະນະສຸກ | 53 | 17,6 |
| 3 | ກະຊວງການເງິນ | 22 | 7,3 |
| 4 | ກະຊວງກະສິກຳ ແລະ ປ່າໄມ້ | 60 | 19,9 |
| 5 | ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ | 6 | 2,0 |
| 6 | ກະຊວງອຸດສາຫະກຳ ແລະ ການຄ້າ | 56 | 18,6 |
| 7 | ກະຊວງໂຍທາທິການ ແລະ ຂົນສົ່ງ | 7 | 2,3 |
| 8 | ກະຊວງພະລັງງານ ແລະ ບໍ່ແຮ່ | 6 | 2,0 |
| 9 | ກະຊວງປ້ອງກັນປະເທດ | 9 | 3,0 |
| 10 | ກະຊວງຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ | 10 | 3,3 |
| 11 | ກະຊວງໄປສະນີ ແລະ ໂທລະຄົມມະນາຄົມ | 6 | 2,0 |
| 12 | ຫ້ອງວ່າການສຳນັກງານປະທານປະເທດ | 1 | 0,3 |
| 13 | ທະນາຄານແຫ່ງ ສປປ ລາວ | 9 | 3,0 |
| 14 | ກະຊວງພາຍໃນ | 1 | 0,3 |
| | ລວມທັງໝົດ | 301 | 100,0 |

*ແຫຼ່ງທີ່ມາ: ໄຊຍະເສນ, ອ. (2016), 'ມາດຕະການກີດກັນການຄ້າທີ່ບໍ່ແມ່ນພາສີ ຢູ່ ສປປ ລາວ', in Ing, ໃຫ້ໃຊ້ເປັນສິ່ງອ້າງອີງ L.Y. S.F. de Cordoba ແລະ O. Cadot (ຜູ້ຮຽບຮຽງ), ມາດຕະການກີດກັ້ນການຄ້າທີ່ບໍ່ແມ່ນພາສີໃນອາຊຽນ, ບົດລາຍງານຂອງໂຄງການຄົ້ນຄວ້າ ຂອງ ERIA 2015-1, ນະຄອນຫລວງ ຈາກາກຕາ: ERIA, ໜ້າທີ 77-85*

145. **ແຕ່ລະລາຍການສິນຄ້າລະຫັດຍ່ອຍຂອງພາສີຢ່າງໜ້ອຍແມ່ນມີໜຶ່ງ NTM ແລະ ຫຼາຍລາຍການແມ່ນມີ NTM ຫຼາຍອັນ.** ສປປ ລາວ ມີ 300 ກວ່າໆ NTMs[22] ເຊິ່ງຢ່າງໜ້ອຍກໍມີໜຶ່ງ NTM ທີ່ນຳໃຊ້ກັບທຸກໆລາຍການສິນຄ້າລະຫັດຍ່ອຍຂອງພາສີ. ທັງໝົດ 9.588 ລາຍການສິນຄ້າລະຫັດຍ່ອຍຂອງພາສີໃນລະບົບເອກະພາບ 8 ຕົວເລກ (HS) ຢ່າງໜ້ອຍແມ່ນມີໜຶ່ງ NTM. ອຸປະສັກທາງດ້ານເຕັກນິກຕໍ່ການຄ້າ (TBT) ກວມເອົາ 30,2 ສ່ວນຮ້ອຍຂອງ NTM ທັງຫມົດແລະມີຜົນກະທົບຕໍ່ 19,4 ສ່ວນຮ້ອຍຂອງລາຍການສິນຄ້າຕາມລະຫັດຍ່ອຍຂອງພາສີ. ໃນຂະນະທີ່ຫຼາຍກວ່າ 200 NTMs ນຳໃຊ້ກັບການນຳເຂົ້າ, ປະມານ 35,8 ສ່ວນຮ້ອຍຂອງລາຍການສິນຄ້າຕາມລະຫັດຍ່ອຍຂອງພາສີແມ່ນຂຶ້ນຢູ່ກັບມາດຕະການທີ່ກ່ຽວຂ້ອງກັບການສົ່ງອອກ. ການແຈກຢາຍ NTMs ຕາມປະເພດ ແລະ ສ່ວນແບ່ງຂອງລາຍການສິນຄ້າຕາມລະຫັດຍ່ອຍຂອງພາສີແມ່ນສະແດງໄວ້ຢູ່ລຸ່ມນີ້ໃນຕາຕະລາງ 4.5.

146. **ສິນຄ້າທີ່ນຳເຂົ້າຫຼາຍອັນຕ້ອງປະຕິບັດຕາມ NTMs ຫຼາຍໆອັນ.** ຫຼາຍກວ່າ 95 ສ່ວນຮ້ອຍຂອງຜະລິດຕະພັນສັດ, ຜະລິດຕະພັນພືດຜັກແລະອາຫານ, 88 ສ່ວນຮ້ອຍຂອງລາຍການໆຂົນສົ່ງ, ແລະ 76 ສ່ວນຮ້ອຍຂອງຜະລິດຕະພັນແຮ່ທາດ, ທັງຫມົດແມ່ນຜະເຊີນກັບສາມ NTMS ຫຼືຫຼາຍກວ່ານັ້ນ. ລາຍການສິນຄ້າຕາມລະຫັດຍ່ອຍຂອງພາສີສ່ວນໃຫຍ່ທີ່ຍັງເຫຼືອແມ່ນຖືກສອງ NTMs. ໂດຍລວມແລ້ວ, ຫຼາຍກວ່າ 3.900 ລາຍການສິນຄ້າຕາມລະຫັດຍ່ອຍຂອງພາສີແມ່ນຜະເຊີນກັບ 3 NTMs ຫຼືຫຼາຍກວ່ານັ້ນ ແລະຫຼາຍກວ່າ 5.500 ລາຍການສິນຄ້າຕາມລະຫັດຍ່ອຍຂອງພາສີແມ່ນຖືກສອງ NTMs. ຜະລິດຕະພັນກະສິກຳ, ລວມທັງພືດຜັກ, ສາມາດຜະເຊີນກັບ 20 NTMs ທີ່ກ່ຽວຂ້ອງກັບ SPS, ການຄວບຄຸມລາຄາ, ແລະມາດຕະການທີ່ກ່ຽວຂ້ອງກັບການສົ່ງອອກ. ລະບຽບການສ່ວນໃຫຍ່ໄດ້ຖືກພິມເຜີຍແຜ່ຢູ່ຂັ້ນກະຊວງ ແລະ ບໍ່ໄດ້ຖືກບັນຍຸດເຂົ້າໃນກົດໝາຍມາດຕະຖານລະດັບຊາດ. ລາຍການ NTMs ແມ່ນມີເປັນບັນຊີຢູ່ໃນສູນຂໍ້ມູນຂ່າວສານການຄ້າແຫ່ງຊາດຂອງ ສປປ ລາວ; ຢ່າງໃດກໍ່ຕາມ, ຂໍ້ມູນກ່ຽວກັບຂະບວນການອະນຸມັດແມ່ນມີຈຳກັດ.

22. ອີງໃສ່ຖານຂໍ້ມູນ NTM ປີ 2015 (ASEAN-ERIA-UNCTAD) ຂໍ້ມູນດິບ (Sayasenh, 2016)

### ຕາຕະລາງ 4.5 ການແຈກຢາຍ NTM ຂອງ ສປປ ລາວ ຕາມປະເພດ

| ລະຫັດ | ປະເພດຂອງມາດຕະການກີດກັນທີ່ບໍ່ແມ່ນພາສີ | ຈຳນວນ NTM | ສ່ວນຮ້ອຍຂອງ NTMs |
|---|---|---|---|
| A | ບັນດາມາດຕະການສຸຂະອານາໄມ ແລະ ສຸຂະອະນາໄມພືດ(SPS) | 38 | 12,6 |
| B | ສິ່ງກີດກັນການຄ້າທາງດ້ານເຕັກນິກ (TBT) | 91 | 30,2 |
| C | ການກວດກາສິນຄ້າກ່ອນສົ່ງອອກ ແລະ ພິທີການອື່ນໆ | 14 | 4,7 |
| E | ການອອກອະນຸຍາດແບບບໍ່ອັດຕະໂນມັດ, ໂກຕາ, ການເກືອດຫ້າມ, ແລະ ບັນດາມາດຕະການຄວບຄຸມດ້ານປະລິມານ(ນອກຈາກ SPS ຫລື TBT | 26 | 8,6 |
| F | ບັນດາມາດຕະການຄວບຄຸມລາຄາ, ລວມທັງບັນດາອາກອນເພີ່ມ ແລະ ຄ່າທຳນຽມຕ່າງໆ | 48 | 15,9 |
| G | ມາດຕະການທາງການເງິນ | 2 | 0,7 |
| P | ມາດຕະການທີ່ກ່ຽວຂ້ອງກັບການສົ່ງອອກ | 82 | 27,2 |
| | ລວມທັງໝົດ | 301 | 100,0 |

*ແຫລ່ງທີ່ມາ: ໄດ້ຈາກໄຊຍະເສນ, (2016)*

## 4.4 ມາດຕະການການຄວບຄຸມລາຄາເປັນຮູບແບບການກີດກັນການຄ້າທີ່ບໍ່ແມ່ນພາສີ

147. **ຢູ່ ສປປ ລາວ ໄດ້ມີສິນຄ້າຫລາຍຕົວທີ່ຢູ່ໃນບັນຊີຄວບຄຸມລາຄາ, ລວມທັງສິນຄ້າສະບຽງອາຫານ, ນໍ້າມັນເຊື້ອໄຟ, ວັດສະດຸຮັບໃຊ້ການຜະລິດກະສິກຳ ແລະ ວັດສະດຸກໍ່ສ້າງ.** ລາຄາທີ່ໝັ້ນທ່ຽງແມ່ນມີຄວາມສຳຄັນເພາະວ່າລາຄາທີ່ເພີ່ມຂຶ້ນຢ່າງໄວວາສຳລັບຜະລິດຕະພັນສິນຄ້າທີ່ຈຳເປັນ ຈະເຮັດໃຫ້ຈຳນວນປະຊາ ກອນທີ່ດຳລົງຊີວິດຕໍ່າກວ່າເສັ້ນຄວາມທຸກຍາກເພີ່ມຂຶ້ນ. ເນື່ອງຈາກ ສປປ ລາວ ມີຂະແໜງກະສິກຳຂະ ໜາດໃຫຍ່, ລາຍໄດ້ຂອງຊາວກະສິກອນຂະໜາດນ້ອຍສ່ວນໃຫຍ່ແມ່ນຖືກກຳນົດດ້ວຍລະດັບ ແລະ ຄວາມໝັ້ນຄົງຂອງລາຄາສິນຄ້າກະສິກຳ. ການຜະລິດເຂົ້າແມ່ນຕິດພັນກັບຄໍ້າປະກັນສະບຽງອາຫານແຫ່ງຊາດ ແລະ ສະຫວັດດີການຂອງຊາວກະສິກອນ ແລະ ຜູ້ຊົມໃຊ້ໃນຕົວເມືອງທີ່ມີລາຍໄດ້ຕໍ່າ. ຜູ້ຜະລິດເຂົ້າມຸ່ງຫວັງຢາກໃຫ້ລາຄາມີສະຖຽນລະພາບໃນລະດັບທີ່ໃຫ້ຜົນຕອບແທນທີ່ 'ພຽງພໍ' ໃຫ້ແກ່ຊາວກະສິກອນແລະໂຮງສີ. ການຕັ້ງລາຄາໂດຍລັດຖະບານເປັນຜູ້ກຳນົດຈະມີຄວາມສ່ຽງເຮັດໃຫ້ສິນຄ້າມີລາຄາແພງສຳລັບຜູ້ຊົມໃຊ້ແລະຜູ້ເສຍພາສີ, ໃນຂະນະດຽວກັນບໍ່ເປັນການຊຸກຍູ້ການລົງທຶນແລະທັງເປັນການຫຼຸດຜ່ອນການເຕີບໂຕອີກດ້ວຍ.

148. **ການກຳນົດລາຄາຂອງລັດຖະບານບໍ່ສາມາດຢັບຢັ້ງການເໜັງຕີງຂອງລາຄາ ແລະ ເປັນການບໍ່ຊຸກຍູ້ສົ່ງເສີມການລົງທຶນ.** ເນື່ອລາຄາຄູ່ມຄອງຢູ່ໃນປະເທດມີຄວາມແຕກຕ່າງກັນຢ່າງຫຼວງຫຼາຍ ກັບລາຄາສິນຄ້ານຳເຂົ້າທີ່ມີຄ່າເທົ່າຫຼຸມກັນ, ການບັງຄັບໃຊ້ລາຄາຄູ່ມຄອງແມ່ນຈຳເປັນຕ້ອງໄດ້ມີການຈຳກັດທາງດ້ານການຄ້າ. ການຈຳກັດການນຳເຂົ້າທີ່ມີລາຄາທີ່ແຂ່ງຂັນກັນໄດ້ເຮັດໃຫ້ການເຕີບໂຕຂອງຜະລິດຕະພາບ ແລະການສ້າງວຽກເຮັດງານທຳຊາລົງ. ການເປີດກວ້າງເສດຖະກິດໂດຍຜ່ານການຄ້າ ແລະ ການປະຕິບັດບັນດາມາດຕະການແກ້ໄຂເພື່ອແນໃສ່ປັບປຸງປະສິດທິພາບຂອງຕະຫຼາດເປັນວິທີທີ່ມີປະສິດທິຜົນກວ່າໃນການຊຸກຍູ້ສົ່ງເສີມໃຫ້ລາຄາມີຄວາມໝັ້ນທ່ຽງ. ທາງທີ່ດີທີ່ສຸດໃນການແກ້ໄຂຄວາມຂັດສົນຂອງຜູ້ທີ່ມີຄວາມບອບບາງຫລາຍທີ່ສຸດແມ່ນການຈັດໃຫ້ມີການສົງເຄາະ ແລະ ບັນເທົາທຸກແບບເຈາະຈົງສະເພາະກຸ່ມເປົ້າຫມາຍ, ແທນທີ່ຈະເປັນການຄວບຄຸມລາຄາ.

149. **ຍົກເລີກການຄວບຄຸມລາຄາ. ຂໍແນະນຳໃຫ້ລົບລ້າງທຸກໆລາຄາຄຸ້ມຄອງຕໍ່າສຸດແລະສູງສຸດຕາມລະບຽບການ, ໃນເວລາດຽວ ລັດຖະບານຄວນຫັນໄປແກ້ໄຂໂດຍສະໜັບສະໜູນການປັບປຸງປະສິດທິ ພາບຂອງກົນໄກຕະຫຼາດ ແລະ ກຳນົດກຸ່ມທີ່ມີຄວາມບອບບາງທີ່ສຸດສຳລັບການຊ່ວຍເຫຼືອແບບມີເປົ້າຫມາຍ.** ການລົງທຶນຈະໄດ້ຮັບການຊຸກຍູ້ສົ່ງເສີມ ຖ້າມີການປັບປຸງສະພາບແວດລ້ອມທີ່ເອື້ອອຳນວຍແກ່ການດຳເນີນທຸລະກິດແລະການເຮັດໃຫ້ປະຊາຊົນເຂົ້າເຖິງຂໍ້ມູນລາຄາສຳລັບຜະລິດຕະພັນທີ່ສຳຄັນ (ເຂົ້າ, ຊີ້ນ, ນໍ້າມັນ) ແລະຂໍ້ມູນລະດັບສິນຄ້າທີ່ມີໃນສາງ ພ້ອມທັງການເສີມສ້າງໃຫ້ຂໍ້ມູນເຫລົ່ານີ້ ມີຄຸນນະພາບ ແລະ ມີການເຜີຍແຜ່ຢ່າງທັນເວລາ. ການມີຂໍ້ມູນລາຄາ ແລະ ຂໍ້ມູນຂ່າວສານກ່ຽວກັບຕົ້ນທຶນ ເພື່ອໃຫ້ສາມາດຮູ້ກັນໄດ້ທົ່ວໄປຫລາຍຂຶ້ນ ຈະຊ່ວຍໃຫ້ການຊອກຮູ້ລາຄາມີປະສິດທິພາບກວ່າເກົ່າ.

## 4.5 ພື້ນຖານໂຄງລ່າງ ທາງດ້ານຄຸນນະພາບແຫ່ງຊາດ (NQI)

150. **ການສົ່ງອອກໄປຍັງຕະຫຼາດພາກພື້ນ ແລະ ຕະຫລາດໂລກ ຮຽກຮ້ອງໃຫ້ຜູ້ສະໜອງຕ້ອງປະຕິບັດຕາມມາດຕະຖານ, ລະບຽບການດ້ານເຕັກນິກ ແລະ ມາດຕະການສຸຂະອະນາໄມ ແລະ ສຸຂານາໄມພືດ (SPS) ທີ່ນຳໃຊ້ໂດຍປະເທດນຳເຂົ້າ.**

ໃນຂະນະທີ່ຕະຫຼາດເປັນຜູ້ກໍານົດມາດຕະຖານ, ລະບຽບການດ້ານເຕັກນິກວິຊາການ ແລະ SPS ແມ່ນເປັນຂໍ້ບັງຄັບ ແລະ ຖືກກໍານົດໂດຍປະເທດທີ່ນໍາເຂົ້າ. WTO ອະນຸ ຍາດໃຫ້ສະມາຊິກຈັດຕັ້ງປະຕິບັດລະບຽບການດ້ານເຕັກນິກ (ພາຍໃຕ້ສັນຍາວ່າດ້ວຍອຸປະສັກດ້ານເຕັກນິກຕໍ່ການຄ້າ) ໂດຍໃຫ້ພວກເຂົານໍາໃຊ້ເທົ່າທຽມກັນລະຫວ່າງຜະລິດຕະພັນທີ່ຜະລິດພາຍໃນແລະນໍາເຂົ້າແລະຖືກອອກແບບມາເພື່ອຫຼຸດຜ່ອນຜົນກະທົບດ້ານການຄ້າຂອງພວກເຂົາ. WTO ມີຂໍ້ຕົກລົງທີ່ຄ້າຍຄືກັນທີ່ກວມເອົາສັດ, ພືດ ແລະຜະລິດຕະພັນອາຫານ (ສັນຍາວ່າດ້ວຍມາດຕະການສຸຂະອະນາໄມ ແລະ ສຸຂານາໄມພືດ) ໂດຍມີຂໍ້ກໍານົດເພີ່ມເຕີມວ່າມາດຕະການເຫຼົ່ານີ້ຕ້ອງອີງໃສ່ເງື່ອນໄຂມາດຖານທາງວິທະຍາ ສາດ. ບັນດາສະຖາບັນທີ່ຮັບຜິດຊອບໃນການພັດທະນາແລະນໍາໃຊ້ມາດຕະການເພື່ອແນໃສ່ຮັບປະກັນຄວາມປອດໄພຂອງຜະລິດຕະພັນສິນຄ້າແມ່ນເອີ້ນຊື່ລວມວ່າພື້ນຖານໂຄງລາງ ຂອງຄຸນນະພາບແຫ່ງຊາດ.

151. **ທໍານຽມປະຕິບັດທີ່ດີດ້ານລະບຽບການ ຈະຫຼຸດຜ່ອນຜົນກະທົບດ້ານການຈໍາກັດການຄ້າຂອງ NTM ໃຫ້ມີໜ້ອຍທີ່ສຸດ. ໃນປັດຈຸບັນໄດ້ມີ "ຊຸດເຄື່ອງມື" ທີ່ເປັນທີ່ຍອມຮັບກ່ຽວກັບທໍານຽມປະຕິບັດທີ່ດີດ້ານລະລະບຽບ ສໍາລັບພື້ນຖານໂຄງລ່າງ ຂອງຄຸນນະພາບແຫ່ງຊາດ.** ການປະຕິບັດທີ່ດີ ຂອງ NQI ຈະມີຄວາມໂປ່ງໃສ, ບໍ່ລໍາອຽງ, ມີຄວາມໜ້າເຊື່ອຖືທາງດ້ານເຕັກນິກ, ທົ່ວເຖິງ, ມີພາກເອກະຊົນເຂົ້າຮ່ວມຢ່າງຕັ້ງ ໜ້າ ແລະ ຮັບປະກັນການແບ່ງພາລະບົດບາດໜ້າທີ່ລະຫວ່າງການຈັດຕັ້ງທີ່ກ່ຽວຂ້ອງ. NQI ປະກອບມີສີ່ພາລະບົດບາດໜ້າທີ່ທີ່ແຕກຕ່າງກັນ: ການກໍານົດມາດຕະຖານ, ການປະເມີນຄວາມສອດຄ່ອງ (ການກວດກາ, ການທົດສອບ ແລະ ການຢັ້ງຢືນ), ການວັດແທກ ແລະ ການຮັບຮອງຄຸນນະພາບ. ພາລະບົດບາດໜ້າທີ່ຫຼາຍຢ່າງເຫຼົ່ານີ້ສາມາດປະຕິບັດໄດ້ໂດຍວິສາຫະກິດເອກະຊົນທີ່ຊ່ຽວຊານສະເພາະດ້ານ; ແນວໃດກໍ່ຕາມ, ສະພາມາດຕະຖານແຫ່ງຊາດສ່ວນໃຫຍ່, ການວັດແທກທີ່ມີກົດໝາຍຮອງຮັບ ແລະ ສະຖາບັນວັດແທກແຫ່ງຊາດ ແລະ ອົງການຮັບຮອງແຫ່ງຊາດ ທັງໝົດເຫຼົ່ານີ້ ປົກກະຕິແລ້ວ ຈະແມ່ນອົງການສາທາລະນະ.

**ອົງປະກອບຂອງພື້ນຖານໂຄງລ່າງ ດ້ານຄຸນນະພາບແຫ່ງຊາດ**

152. **ພື້ນຖານໂຄງລ່າງດ້ານຄຸນນະພາບແຫ່ງຊາດ (NQI) ປະກອບມີ ການກໍານົດມາດຕະຖານ, ການທົດສອບ, ການຢັ້ງຢືນ, ວັດແທກ ແລະ ການຮັບຮອງຄຸນນະພາບ, ທັງຫມົດລ້ວນເປັນສິ່ງຈໍາເພື່ອພິສູດວ່າຜະລິດຕະພັນສິນຄ້າຫຼືການບໍລິການຈະຕອບສະໜອງໄດ້ກັບຈຸດປະສົງນະໂຍບາຍສາທາລະນະ ເຊັ່ນ: ສຸ ຂະພາບ ແລະ ຄວາມປອດໄພ.** ການພົວພັນລະຫວ່າງສ່ວນປະກອບທີ່ແຕກຕ່າງກັນ ຂອງ NQI ແມ່ນສະ ແດງຢູ່ໃນຮູບ 4.6. ພາກສ່ວນກ່ຽວຂ້ອງຢູ່ໃນສໍານັກງານມາດຕະຖານແຫ່ງຊາດເປັນຜູ້ກໍານົດມາດຕະຖານສໍາລັບອົງການການຢັ້ງຢືນແລະການກວດສອບ ເຊັ່ນດຽວກັນກັບຫ້ອງວິໄຈແລະການປັບທຽບ. ອົງການຮັບຮອງຢືນຢັນຄວາມສາມາດຂອງການບໍລິການການປະເມີນຄວາມສອດຄ່ອງ. ໃບຢັ້ງຢືນຫຼືບົດລາຍງານຈາກອົງການການປະເມີນຄວາມສອດຄ່ອງແມ່ນອອກໃຫ້ບໍລິສັດຫຼືອົງການຈັດຕັ້ງທີ່ປະຕິບັດຕາມມາດຕະ ຖານທີ່ກ່ຽວຂ້ອງ. ຜູ້ຊົມໃຊ້, ທຸລະກິດ ແລະ ສາທາລະນະຊົນທັງຫມົດລ້ວນໄດ້ຮັບຜົນປະໂຫຍດຈາກການຢັ້ງຢືນໃນຮູບແບບຄຸນນະພາບຜະລິດຕະພັນສິນຄ້າທີ່ສູງຂຶ້ນ, ຄວາມປອດໄພຂອງຜະລິດຕະພັນສິນຄ້າແລະສຸຂະພາບທີ່ດີຂຶ້ນ, ຜົນກະທົບຕໍ່ສິ່ງແວດລ້ອມທີ່ຫຼຸດລົງແລະໂອກາດການຄ້າທີ່ເພີ່ມຂຶ້ນ. ຢ່າງໃດກໍ່ຕາມ, ມາດຕະຖານ, ລະບຽບການດ້ານວິຊາການ ແລະ ການປະເມີນຄວາມສອດຄ່ອງແບບບັງຄັບສາມາດກາຍເປັນພາລະສໍາລັບບັນດາບໍລິສັດ. ອັນນີ້ແມ່ນຄວາມຈິງໂດຍສະເພາະໃນເວລາທີ່ຜົນໄດ້ຮັບຂອງການປະເມີນຄວາມສອດຄ່ອງບໍ່ໄດ້ຮັບການຍອມຮັບໃນຕະຫຼາດສາກົນແລະວິສາຫະກິດຈໍາເປັນຕ້ອງເສຍຄ່າໃຊ້ຈ່າຍສໍາລັບການທົດສອບແລະການຢັ້ງຢືນທີ່ຊໍ້າກັນ.

153. **ມາດຕະຖານແມ່ນເອກະສານທີ່ເປັນທາງການ, ເຊິ່ງມີຂໍ້ກໍານົດວ່າຜະລິດຕະພັນສິນຄ້າ, ຂະບວນການ ຫຼື ການບໍລິການຄາດວ່າຈະເປັນໄປຕາມນັ້ນ.** ນະໂຍບາຍການປະຕິບັດທີ່ດີທີ່ສຸດສະໜັບສະໜູນ ການນໍາໃຊ້ມາດຕະຖານສາກົນແລະການລຶບລ້າງມາດຕະຖານທີ່ຫຼ້າສະໄໝໃຫ້ໄດ້ຫລາຍທີ່ສຸດ. ມາດຕະ ຖານສາກົນຄວນໄດ້ຖືກນໍາມາໃຊ້ໃນຂົງເຂດທີ່ມີເງື່ອນໄຂພາຍໃນພຽງພໍ ດ້ານເຕັກໂນໂລຊີ ແລະ ມີທ່າແຮງດ້ານການຄ້າສູງ. ລະບຽບການດ້ານເຕັກນິກວິຊາການ ມັກຈະເອີ້ນວ່າມາດຕະຖານບັງຄັບ ຍ້ອນວ່າຕ້ອງໄດ້ປະຕິບັດຕາມນັ້ນ. ບັນດາອຸດສາຫະກໍາຫຼືອົງການຈັດຕັ້ງສາກົນກໍ່ສາມາດວາງມາດຕະຖານໂດຍເປັນຂໍ້ສະ ເໜີແນະ ແລະ ສິ່ງເຫຼົ່ານີ້ເອີ້ນວ່າມາດຕະຖານເອກະຊົນ. ເມື່ອປະເທດຕ່າງໆມີການວາງລະບຽບການດ້ານເຕັກນິກວິຊາການ, ເປັນທໍານຽມປະຕິບັດທີ່ດີທີ່ສຸດທີ່ຈະເລືອກໃຊ້ມາດຕະຖານສາກົນທີ່ໄດ້ຮັບການຕົກ ລົງເຫັນດີຈາກບັນດາອຸດສາຫະກໍາ ແລະ ອົງການສາກົນ.

**ມາດຕະຖານ** ກໍານົດຄຸນລັກສະນະຫຼືສະມັດຖະນະ ແລະຖ່າຍທອດຂໍ້ມູນຂ່າວສານໃຫ້ກັບຜູ້ຊື້ / ຜູ້ໃຊ້ແລະເປັນແບບສະໝັກໃຈ. ຕາມປົກກະຕິ ອົງການສາກົນທີ່ລົງເລິກສະເພາະດ້ານ ທີ່ເປັນຕົວແທນຂອງກຸ່ມອຸດສາຫະກໍາ, ຫຼືແມ້ກະທັ້ງບໍລິສັດເອກະຊົນ, ຫຼືກຸ່ມບໍລິສັດເອກະຊົນ ຈະເປັນຜູ້ກໍານົດມາດຕະຖານ. WTO ບໍ່ໄດ້ເປັນຜູ້ກໍານົດມາດຕະຖານເຫຼົ່ານີ້.

**ລະບຽບການດ້ານເຕັກນິກວິຊາການ**ບາງຄັ້ງເອີ້ນວ່າມາດຕະຖານບັງຄັບ, ເຊິ່ງວາງອອກເພື່ອກໍານົດຄຸນລັກສະນະຫຼືສະມັດຖະນະໃຫ້ເປັນໄປຕາມທີ່ລະບຽບຂໍ້ບັງຄັບຂອງລັດຖະກອງຕ້ອງການ. ລະບຽບການດ້ານເຕັກນິກວິຊາການສາມາດຖືກກໍານົດໂດຍລັດຖະບານ, ໂດຍໄດ້ຮັບເອົາມາຈາກອົງການຈັດຕັ້ງສາກົນຫຼືພາກພື້ນ, ຫຼືບໍລິສັດເອກະຊົນ. ເພື່ອໃຫ້ສອດຄ່ອງກັບ WTO, ພວກເຂົາຄວນຈະມີການຈໍາກັດຕໍ່ການຄ້າໃຫ້ໜ້ອຍທີ່ສຸດ ແລະ ເອົາຕາມມາດຕະຖານສາກົນແລ້ວແຕ່ຈະປະຕິບັດໄດ້.

154. **ການປະເມີນຄວາມສອດຄ່ອງລວມມີ ການບໍລິການດ້ານການທົດສອບ, ການກວດກາ ແລະ ການຢັ້ງຢືນ.** ການທົດສອບໝາຍເຖິງການບໍລິການສາທາລະນະຫຼືເອກະຊົນທີ່ກຳນົດຄຸນລັກສະນະຜະລິດຕະພັນສິນຄ້າບາງຢ່າງທຽບໃສ່ກັບຂໍ້ກຳນົດຂອງມາດຕະຖານ. ການກວດກາສ່ວນໃຫຍ່ແມ່ນດຳເນີນກັບສິນຄ້າທີ່ຖືກສົ່ງມາເພື່ອຮັບປະກັນວ່າຈຳນວນທີ່ສົ່ງມາທັງຫມົດນັ້ນ ແມ່ນທຽບເທົ່າກັບຕົວຢ່າງຜະລິດຕະພັນສິນຄ້າທີ່ໄດ້ທົດສອບ. ຕົວຢ່າງໜຶ່ງແມ່ນການກວດກາການນຳເຂົ້າທີ່ເຮັດຢູ່ຊາຍແດນ. ສະຖາບັນເອກະຊົນຫຼື ຂອງລັດ ເປັນຜູ້ໃຫ້ບໍລິການກວດກາ. ການຢັ້ງຢືນໝາຍເຖິງການພິສູດຢ່າງເປັນທາງການໂດຍອົງການຢັ້ງຢືນ (ເຊິ່ງສາມາດເປັນຂອງລັດ ຫຼືເອກະຊົນ) ເຊິ່ງປະກອບດ້ວຍການປະເມີນຜົນຫຼັງຈາກການທົດສອບວ່າຜະລິດຕະພັນສິນຄ້າ, ການບໍລິການ, ອົງກອນ ຫຼື ບຸກຄົນເຮັດໄດ້ຕາມຂໍ້ກຳນົດ.

## ຮູບທີ 4.6 ອົງປະກອບຂອງພື້ນຖານໂຄງລ່າງ ດ້ານຄຸນນະພາບແຫ່ງຊາດ




*ແຫລ່ງທີ່ມາ: ອີງໃສ່ Guasch ແລະຄະນະຊ່ຽວຊານ (2007) ແລະ Racine (2011)*

155. ກົມມາດຕະຖານ ແລະ ການວັດແທກ (DOSM), ພາຍໃຕ້ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ(ໃນເມື່ອກ່ອນ), ດຳເນີນການເປັນອົງການຄຸ້ມຄອງ. DOSM ແມ່ນອົງການອຳນາດລັດທີ່ເປັນຫລັກໃນການຄຸ້ມຄອງກ່ຽວກັບມາດຕະຖານ, ການວັດແທກ, ການຮັບຮອງ, ການປະເມີນຄວາມສອດຄ່ອງແລະກິດຈະກຳທີ່ກ່ຽວຂ້ອງ. ທຳນຽມປະຕິບັດທີ່ດີດ້ານຄຸ້ມຄອງດ້ວຍລະບຽບການຈະມີການແຍກລະບຽບການອອກຈາກການປະເມີນຄວາມສອດຄ່ອງ (ການທົດສອບແລະການຢັ້ງຢືນ). MOST ອອກລະບຽບການກ່ຽວກັບເຄື່ອງໝາຍການຢັ້ງຢືນທີ່ຈຳເປັນ ສຳລັບຜະລິດຕະພັນທີ່ກ່ຽວຂ້ອງກັບຄວາມປອດໄພ, ສຸຂະອະນາໄມ, ສຸຂະພາບ, ສິ່ງແວດລ້ອມ ແລະ ຄວາມປອດໄພສາທາລະນະ. ສປປ ລາວ ຮັບຮູ້ຜົນການປະເມີນຄວາມສອດຄ່ອງ ຂອງຕ່າງປະເທດ ຖ້າມີໃບຢັ້ງຢືນຈາກຫ້ອງວິໄຈທີ່ໄດ້ຮັບການຮັບຮອງ ຂອງມາດຕະຖານແຫ່ງຊາດໃນປະເທດທີ່ສົ່ງອອກ. ສິນຄ້າທີ່ໄດ້ຕາມມາດຕະຖານສາກົນ (ເຊັ່ນ: ບັນດາມາດຕະຖານທີ່ IEC ໄດ້ສ້າງຂຶ້ນ), ແມ່ນຈະໄດ້ຮັບການກວດຜ່ານເພື່ອການນຳເຂົ້າ. ສປປ ລາວ ຮັບຮູ້ບົດລາຍງານການກວດສອບທັງໝົດທີ່ອອກໃຫ້ໂດຍຫ້ອງວິໄຈທີ່ໄດ້ຮັບການຮັບຮອງຈາກອົງການຮັບຮອງແຫ່ງຊາດອາຊຽນ ທີ່ເປັນຜູ້ລົງນາມໃນສັນຍາການຮັບຮູ້ເຊິ່ງກັນແລະກັນຂອງ ILAC (MRAs).

156. **ອົງການຮັບຮອງແຫ່ງຊາດ (LNAB) ເປັນສ່ວນໜຶ່ງຂອງ DOSM.** LNAB ປະກອບດ້ວຍສະມາຊິກຈາກ MOIC, MOH, MAF, MPWT, LNCCI ແລະຜູ້ຊ່ຽວຊານສ່ວນບຸກຄົນ. LNAB ມີການເກັບຮັກສາປຶ້ມທະບຽນ ຂອງຫ້ອງວິໄຈທີ່ໄດ້ຮັບການຮັບຮອງ ແລະ ຂອງອົງການຢັ້ງຢືນ ແລະໃຫ້ຄຳແນະນຳດ້ານວິຊາການກັບກົມກອງຂອງລັດຖະບານກ່ຽວກັບຂັ້ນຕອນການປະເມີນຄວາມສອດຄ່ອງ.

157. **MAF ແລະ MOH ພ້ອມດ້ວຍພະແນກ ແລະ ຫ້ອງການສາທາລະນະສຸກ, ກະສິກຳ ແລະ ປ່າໄມ້ແຂວງ ແລະ ເມືອງ ເປັນອົງການທີ່ຄວບຄຸມຄຸ້ມຄອງຄວາມປອດໄພດ້ານສະບຽງອາຫານ ແລະ ສຸຂະພາບສັດ ແລະ ພືດ.** ກົມອາຫານ ແລະ ຢາ (FDD) ໃນກະຊວງສາທາລະນະສຸກ (MOH) ຮັບຜິດຊອບດ້ານຄວາມປອດໄພ ຂອງອາຫານ, ນະໂຍບາຍ ແລະ ຍຸດທະສາດ (ພາຍໃຕ້ກົດໝາຍວ່າດ້ວຍອາຫານ 2013). ສູນວິໄຈອາຫານ ແລະ ຢາ ແຫ່ງຊາດ ແລະ ຂະແໜງອາຫານ ແລະ ຢາແຂວງ ເປັນຜູ້ຈັດຕັ້ງປະຕິບັດລະບຽບກົດໝາຍວ່າດ້ວຍຄວາມປອດໄພດ້ານອາຫານ ໂດຍຜ່ານການຄວບຄຸມ ດູແລຕະຫຼາດ ແລະ ກວດກາຜູ້ຜະລິດອາຫານ, ໂຮງແຮມ ແລະ ຮ້ານອາຫານ. ພະແນກປູກຝັງຂອງກົມປູກຝັງ, ກະຊວງ ກະສິກຳແລະ ປ່າໄມ້ ແມ່ນເປັນຈຸດສອບຖາມຂໍ້ມູນດ້ານ SPS ແລະ ພະແນກນະໂຍບາຍການຄ້າຫຼາຍຝ່າຍໃນ MOIC ເປັນໜ່ວຍແຈ້ງຂໍ້ມູນ SPS.

158. **ຂອບກົດໝາຍຂອງ TBT ແລະ SPS ແມ່ນເຂົ້າກັນໄດ້ກັບຂອງ WTO, ແຕ່ຂໍ້ຈຳກັດດ້ານຂີດຄວາມສາມາດເປັນອຸປະສັກຂອງການຈັດຕັ້ງປະຕິບັດທີ່ໄດ້ຜົນດີ.** ສປປ ລາວ ໄດ້ປະຕິບັດຂອບກົດໝາຍທີ່ຄົບຖ້ວນກ່ຽວກັບລະບຽບການດ້ານເຕັກນິກວິຊາການ ແລະ SPS ສຳລັບຄວາມປອດໄພດ້ານອາຫານ, ສຸຂະພາບສັດ ແລະ ພືດ ເຊິ່ງມີຄວາມສອດຄ່ອງກັບສັນຍາກ່ຽວຂ້ອງຂອງ WTO. ເຖິງຢ່າງໃດກໍຕາມ, ການຂາດແຄນບຸກຄະລາກອນວິຊາການຢູ່ຂັ້ນແຂວງ ແລະ ເມືອງຢ່າງຫນັກໜ່ວງ ກໍເປັນການຢັບຢັ້ງການຈັດຕັ້ງປະຕິບັດຢ່າງມີປະສິດທິຜົນ. ການບໍ່ມີສິ່ງອຳນວຍຄວາມສະດວກໃນການກັກກັນຢູ່ດ່ານຊາຍແດນຂອງ ສປປ ລາວ ຮຽກຮ້ອງໃຫ້ຜູ້ນຳເຂົ້າສັດ ແລະ ສັດລ້ຽງທັງໝົດຕ້ອງສະໜອງຫຼັກຖານການກວດກາການກັກກັນຈາກປະເທດທີ່ສົ່ງອອກ. ສປປ ລາວ ປະຕິບັດຕາມຂໍ້ແນະນຳສົນທິສັນຍາສາກົນກ່ຽວກັບການປ້ອງກັນພືດເພື່ອຈັດຕັ້ງປະຕິບັດມາດຕະການ SPS ສຳລັບພືດ. ການນຳເຂົ້າພືດແມ່ນບໍ່ໄດ້ຖືກກວດກາໂດຍສະເພາະການນຳເຂົ້າທີ່ມີໃບຢັ້ງຢືນສຸຂະພາບຂອງພືດທີ່ອອກໃຫ້ໂດຍເຈົ້າໜ້າທີ່ໆມີສິດອຳນາດໃນປະເທດສົ່ງອອກ.

159. **ສິ່ງທ້າທາຍດ້ານຂີດຄວາມສາມາດເຮັດໃຫ້ການນຳເຂົ້າກາຍເປັນບຸລິມະສິດສຳລັບການທົດສອບ, ເປັນການເພີ່ມຕົ້ນທຶນດ້ານການຄ້າແລະທຳລາຍຄວາມປອດໄພຂອງອາຫານ.** ຜະລິດຕະພັນອາຫານທີ່ນຳເຂົ້າຕ້ອງມີໃບຢັ້ງຢືນການວິເຄາະ (COA), ໃບຢັ້ງຢືນສຸຂະພາບ (HC), ໃບຢັ້ງຢືນ GMP ແລະໃບຢັ້ງຢືນ HACCP, ທີ່ອອກໃຫ້ໂດຍພະນັກງານເຈົ້າໜ້າທີ່ ຂອງປະເທດຜູ້ສົ່ງອອກຫຼືໂດຍບຸກຄົນທີສາມຝ່າຍເອກະຊົນ ທີ່ໄດ້ຮັບການຮັບຮອງຈາກອົງການທີ່ມີອຳນາດໜ້າທີ່ໃນດ້ານນີ້. ຍັງມີການຮຽກຮ້ອງໃຫ້ເອົາສິນຄ້າຕົວຢ່າງມາທົດສອບ. ວິສາຫະກິດ ຂອງ ສປປ ລາວ ຕ້ອງໄດ້ປະຕິບັດຕາມມາດຕະຖານແຫ່ງຊາດ ທີ່ອີງໃສ່ມາດຕະຖານ Codex, ຄຳແນະນຳ ແລະ ຂໍ້ສະເໜີແນະ. ຜູ້ຜະລິດພາຍໃນແມ່ນຈຳເປັນຕ້ອງໄດ້ທົດສອບຄືນໃຫມ່ທຸກໆ 180 ວັນເພື່ອສະແດງໃຫ້ເຫັນການປະຕິບັດຕາມຢ່າງຕໍ່ເນື່ອງ; ຢ່າງໃດກໍຕາມ, ເນື່ອງຈາກການຂາດແຄນພະນັກງານແລະຂາດທາງດ້ານການເງິນ, ການກວດກາອາຫານແມ່ນດຳເນີນການແຕ່ພຽງເມື່ອໄດ້ຮັບຄຳຮ້ອງທຸກແລະການແຈ້ງເຕືອນຄວາມປອດໄພເທົ່ານັ້ນ. ຂັ້ນຕອນການກວດກາອາຫານ (ສະ ບັບເລກທີ 297/ສທ) ແມ່ນປະຕິບັດຕາມລະບົບການປະເມີນຄວາມສ່ຽງທີ່ນຳໃຊ້ກັບທັງການນຳເຂົ້າ ແລະ ອາຫານທີ່ຜະລິດພາຍໃນປະເທດ. ໃນທາງປະຕິບັດ, ການຂາດເຂີນພະນັກງານສົ່ງຜົນໃຫ້ເຈົ້າໜ້າທີ່ກະຊວງສາທາລະນະສຸກໃຫ້ຄວາມສຳຄັນຕໍ່ການກວດກາການນຳເຂົ້າ.

160. **ການຊ່ວຍເຫຼືອດ້ານວິຊາການສຳລັບ NQI ຍັງຄົງເປັນບູລິມະສິດ.** ໂຄງການພັດທະນາການຄ້າຍັງສືບຕໍ່ໃຫ້ການຊ່ວຍເຫຼືອດ້ານວິຊາການແກ່ MAF, MOH ແລະ MOST ເພື່ອສ້າງຄວາມເຂັ້ມແຂງດ້ານການຈັດຕັ້ງ ແລະ ລະບຽບກົດໝາຍກ່ຽວກັບ SPS, ພັດທະນານະໂຍບາຍແລະມາດຕະການຄວບຄຸມຄວາມສ່ຽງ ແລະເສີມສ້າງບົດບາດຂອງພາກເອກະຊົນໃນລະບອບ SPS.

# ບົດທີ 5 ການຄຸ້ມຄອງຊາຍແດນ, ໂລຊິດສະຕິກການຄ້າ ແລະ ການເຊື່ອມຈອດ

161. **ບົດນີ້ເນັ້ນໃສ່ການອຳນວຍຄວາມສະດວກທາງດ້ານການຄ້າ, ການບໍລິການໂລຊິດສະຕິກ ແລະ ການຂົນສົ່ງ.** ໃນບົດນີ້ຈະຍົກໃຫ້ເຫັນບັນດາບັນຫາສຳຄັນທີ່ກ່ຽວຂ້ອງເຖິງຂະບວນການແຈ້ງພາສີຢູ່ດ່ານຊາຍແດນ (ລວມທັງພາສີ ແລະ ອົງການອື່ນໆ ຂອງ ລັດຖະບານ (OGAs)), ບັນຫາການບໍລິການດ້ານໂລຊິດສະຕິກ ແລະ ການຂົນສົ່ງ. ໃນບົດນີ້ແມ່ນສຸມໃສ່ການກຳນົດການດຳເນີນການຕ່າງໆທີ່ເປັນບູລິມະ ສິດ, ລວມທັງການປັບປຸງໃຫ້ຂັ້ນຕອນການປະກອບເອກະສານມີປະສິດທິພາບກວ່າເກົ່າ ແລະ ງ່າຍຂຶ້ນ, ຂໍ້ກຳນົດດ້ານລະບຽບການ, ການກວດກາ ແລະ ຂັ້ນຕອນການນຳເຂົ້າ, ການສົ່ງອອກ ແລະ ສິນຄ້າຜ່ານແດນ.

162. **ການຄຸ້ມຄອງຊາຍແດນ, ການບໍລິການດ້ານໂລຊິດສະຕິກທາງການຄ້າ ແລະ ຂົນສົ່ງແມ່ນຕົວກຳນົດຕົ້ນຕໍ ຂອງຕົ້ນທຶນການຄ້າ.** ສຳລັບ ສປປ ລາວ, ໃນຖານະທີ່ເປັນປະເທດທີ່ບໍ່ມີທາງອອກສູ່ທະເລ, ການອຳນວຍຄວາມສະດວກທາງດ້ານການຄ້າແມ່ນເປັນຕົວກຳນົດທີ່ສຳຄັນທີ່ສຸດສຳລັບການຄ້າພາຍໃນ, ພາກພື້ນ ແລະ ສາກົນ. ແຜນຍຸດທະສາດການອຳນວຍຄວາມສະດວກດ້ານການຄ້າ (TFSP) ປີ 2011 (2011-2015) ໄດ້ພະຍາຍາມເຮັດໃຫ້ລະບຽບວິທີປະຕິບັດຢູ່ດ່ານຊາຍແດນມີຄວາມກະທັດຮັດງ່າຍດາຍ ແລະ ຫຼຸດຜ່ອນຕົ້ນທຶນການຄ້າ ເພື່ອຊຸກຍູ້ສົ່ງເສີມຄວາມສາມາດແຂ່ງຂັນດ້ານການຄ້າ. TFSP ໄດ້ໃຫ້ຄຳໝັ້ນສັນຍາໃນການເຊື່ອມສານການອຳນວຍຄວາມສະດວກທາງດ້ານການຄ້າເຂົ້າໃນກະແສຫລັກຂອງວຽກງານຂອງບັນດາກະຊວງຂອງລັດຖະບານ, ປັບປຸງຂັ້ນຕອນການຄ້າ ແລະ ພາສີໃຫ້ກະທັດຮັດ, ປະຕິບັດພັນທະຜູກພັນຂອງ WTO, ອາຊຽນ ແລະ GMS, ສ້າງຂີດຄວາມສາມາດຂອງພາກເອກະຊົນ ແລະ ຊຸກຍູ້ການເຄື່ອນໄຫວຂອງກອງເລຂາອຳນວຍຄວາມສະດວກດ້ານການຄ້າ (ທີ່ໄດ້ສ້າງຕັ້ງຂຶ້ນໃນປີ 2010) ໃນນາມເປັນຈຸດປະສານງານ. TFSP ໄດ້ປັບປຸງບາງຂັ້ນຕອນການແຈ້ງພາສີໃຫ້ສະດວກງ່າຍດາຍໂດຍໄດ້ສະເໜີໃຫ້ນຳໃຊ້ການບໍລິຫານຄວາມສ່ຽງ, ການກວດສອບຫລັງການແຈ້ງພາສີ, ການຂໍປະກອບເອກະສານແຈ້ງພາສີລ່ວງໜ້າບົນພື້ນຖານການຕົກລົງທີ່ມີຜົນຜູກພັນທາງກົດໝາຍ ແລະ ການປັບປຸງການປະສານງານ. ພື້ນຖານໂຄງລ່າງຊາຍແດນກໍ່ໄດ້ຮັບການປັບປຸງໂດຍໄດ້ຮັບການປະກອບຄອມພິວເຕີໃຫ້ໃໝ່ ແລະ ມີສິ່ງອຳນວຍຄວາມສະດວກທີ່ດີຂຶ້ນ; ໄດ້ສ້າງຕັ້ງອົງກອນອຳນວຍຄວາມສະດວກທາງດ້ານການຄ້າແຫ່ງຊາດ.

163. **ສປປ ລາວ ໄດ້ນຳໃຊ້ TFA ຂອງ WTO ເປັນຢ່າງດີ ເພື່ອປັບປຸງວາລະການອຳນວຍຄວາມສະດວກດ້ານການຄ້າຄືນໃໝ່.** TFA ປະກອບດ້ວຍຂໍ້ກຳນົດເພື່ອເລັ່ງລັດການເຄື່ອນຍ້າຍ, ການປ່ອຍ ແລະ ການແຈ້ງພາສີ ຂອງສິນຄ້າ ເມື່ອສິນຄ້າເຄື່ອນຍ້າຍລະຫວ່າງຊາຍແດນໂດຍຜ່ານການຮ່ວມມືທີ່ມີປະສິດທິຜົນລະຫວ່າງພາສີແລະ OGAs ກ່ຽວກັບການອຳນວຍຄວາມສະດວກດ້ານການຄ້າ ແລະບັນຫາການປະຕິບັດຕາມລະບຽບການພາສີ. ແຜນດຳເນີນງານການອຳນວຍຄວາມສະດວກດ້ານການຄ້າຂອງ ສປປ ລາວ (TFR) ໄລຍະ 2017-2022 ໄດ້ຊອກສະແຫວງຫາການກະຕຸກຊຸກຍູ້ວາລະການອຳນວຍຄວາມສະດວກດ້ານການຄ້າຄືນໃໝ່.

164. **ໃນໄລຍະນີ້, TFR ໄດ້ຫຼຸດຜ່ອນເວລາ ແລະ ຄ່າໃຊ້ຈ່າຍການປ່ອຍສິນຄ້າ. ເວລາການແຈ້ງພາສີສະເລ່ຍໄດ້ຫຼຸດລົງຈາກ 11 ຊົ່ວໂມງໃນປີ 2012 ເປັນ 8 ຊົ່ວໂມງ ກັບ 10 ນາທີໃນປີ 2019 ແລະ 5 ຊົ່ວໂມງ ກັບ 7 ນາທີ ໃນປີ 2020** . ພ້ອມດຽວກັນ ການປະຕິຮູບຂັ້ນຕອນ ແລະ ມາດຕາຖານການດຳເນີນງານກໍ່ໄດ້ຫຼຸດເວລາການກະກຽມເອກະສານ ຈາກ 216 ຊົ່ວໂມງໃນປີ 2016 ມາເປັນ 60 ຊົ່ວໂມງໃນປີ 2020. ນອກຈາກນັ້ນ, ສປປ ລາວ ໄດ້ເປີດການກວດກາຈຸດດຽວ (SSI) ຢູ່ດ່ານຊາຍແດນແດນສະຫວັນ-ລາວບາວ ກັບ ສສ ຫວຽດນາມ ຕາມສັນຍາການຂົນສົ່ງຂ້າມແດນ (CBTA). ກອງເລຂາອຳນວຍຄວາມສະດວກດ້ານການຄ້າໄດ້ຈັດກອງປະຊຸມພຽງແຕ່ປີລະ 1 ຄັ້ງ ໂດຍໄດ້ມອບວຽກງານປະຈຳວັນໃຫ້ກົມການນຳເຂົ້າ ແລະ ສົ່ງອອກ (DIMEX) ທີ່ບໍ່ມີອຳນາດໜ້າທີ່ໃນການຂັບເຄື່ອນການຈັດຕັ້ງປະຕິບັດຫຼືຕິດຕາມກວດກາ.

165. **ພັນທະຜູກພັນຂອງ ສປປ ລາວ ໃນການຈັດຕັ້ງປະຕິບັດການປະຕິຮູບການອຳນວຍຄວາມສະດວກດ້ານການຄ້າໃນຫຼາຍດ້ານ ໄດ້ມີຄວາມຄືບໜ້າ, ແຕ່ການປະຕິຮູບເພີ່ມຕື່ມແມ່ນຍັງມີຄວາມຈຳເປັນ.** ສປປ ລາວ ເປັນປະເທດທີ່ໄດ້ລົງນາມໃນສັນຍາການອຳນວຍຄວາມສະດວກດ້ານການຄ້າຂອງ WTO (2017) ແລະ ໄດ້ລວມເອົາພັນທະຜູກພັນ ຂອງສັນຍາ TFA ເຂົ້າໃນແຜນດຳເນີນງານການອຳນວຍຄວາມສະດວກທາງດ້ານການຄ້າຂອງ ສປປ ລາວ ໄລຍະ 2017-2022. ເສົາຄ້ຳ B ຂອງໂຄງການສົ່ງເສີມຄວາມສາມາດໃນການແຂ່ງຂັນ ແລະ ການຄ້າ (CTP) ທີ່ທະນາຄານໂລກໄດ້ໃຫ້ທຶນ ແຕ່ປີ 2018-2022 (ປັດຈຸບັນໄດ້ຂະຫຍາຍອອກໄປເຖິງ 2023) ພະຍາຍາມຊຸກຍູ້ການປະຕິຮູບການອຳນວຍຄວາມສະດວກທາງດ້ານການຄ້າ ແລະ ຫຼຸດຜ່ອນເວລາ, ຂໍ້ກຳນົດດ້ານເອກະສານ ແລະຕົ້ນທຶນໃນການຄ້າຂາຍລະຫວ່າງຊາຍແດນ. ອົງປະກອບຍ່ອຍຂອງ ເສົາຄ້ຳ B ລວມມີການສະໜັບສະໜູນຄະນະກຳມະການອຳນວຍຄວາມສະດວກດ້ານການຄ້າແຫ່ງຊາດ (NTFC) ແລະ ໂຄງການທຶນຊ່ວຍເຫລືອເພື່ອແກ້ບັນຫາສະເພາະ ຂອງ TFA.

166. **ການຈັດຕັ້ງປະຕິບັດ TFA ຢ່າງມີປະສິດທິຜົນຈະເຮັດໃຫ້ຕົ້ນທຶນການຄ້າຫຼຸດລົງ ແລະ ເປັນຜົນປະໂຫຍດໃຫ້ແກ່ພາກເອກະຊົນ.** TFA ໄດ້ຈັດໃຫ້ມີການປົກປ້ອງຈຸດປະສົງສາທາລະນະທີ່ຖືກຕ້ອງຕາມກົດໝາຍໃນຂົງເຂດຕ່າງໆ ເຊັ່ນ: ການຈັດເກັບລາຍຮັບ, ການປົກປ້ອງຊຸມຊົນ ແລະ ຄວາມໝັ້ນຄົງແຫ່ງຊາດ. ການຈະບັນລຸເປົ້າໝາຍສາທາລະນະດັ່ງກາວ

23. ແຜນດຳເນີນງານການອຳນວຍຄວາມສະດວກທາງດ້ານການຄ້າ (TFR) ຂອງ ສປປ ລາວ ໄລຍະ 2017-2022, ກະຊວງອຸດສາຫະກຳ ແລະ ການຄ້າ, ກອງເລຂາອຳນວຍຄວາມສະດວກດ້ານການຄ້າ, ປີ 2017.

ໃນຂະນະທີ່ມີການອຳນວຍຄວາມສະດວກທາງດ້ານການຄ້າຍັງຮຽກຮ້ອງໃຫ້ມີການຮ່ວມເຄື່ອນໄຫວ, ການປະສານງານ, ການຮ່ວມມືໃນທົ່ວທຸກອົງການລັດຖະບານທີ່ກ່ຽວຂ້ອງກັບການຄ້າ ແລະ ຕ້ອງການການປຶກສາຫາລືຢ່າງກວ້າງຂວາງກັບພາກສ່ວນອື່ນໆທີ່ກ່ຽວຂ້ອງ. ຍ້ອນອົງການຈັດຕັ້ງຂອງລັດຖະບານແລະຜູ້ມີສ່ວນໄດ້ສ່ວນເສຍທີ່ເຂົ້າກ່ຽວຂ້ອງໃນລະບຽບການການຄ້າມີຈຳນວນຫລາຍ, ຈຶ່ງເປັນເຫດຜົນໃຫ້ TFA ຮຽກຮ້ອງໃຫ້ສະມາຊິກແຕ່ລະປະເທດມີການສ້າງຕັ້ງ NTFC.

## 5.1 ຜົນງານການເຄື່ອນໄຫວ (ຫລື ປະສິດທິພາບ) ທາງດ້ານໂລຊິດສະຕິກດ້ານການຄ້າ ແລະ ດ້ານການຄ້າຂ້າມຊາຍແດນຂອງ ສປປ ລາວ

167. **ບົດລາຍງານຂອງ ສປປ ລາວ ກ່ຽວກັບໂລຊິດສະຕິກດ້ານການຄ້າ ແລະ ການຄ້າລະຫວ່າງຊາຍແດນ ໄດ້ເພີ່ມຄວາມຈຳເປັນໃນການອຳນວຍຄວາມສະດວກທາງດ້ານການຄ້າຂຶ້ນຕື່ມ.** ດັດຊະນີຊີ້ວັດປະສິດທິພາບທາງດ້ານໂລຊິດສະຕິກ ຂອງສປປ ລາວແບບມີການສົມທຽບ ຕາມການຈັດລະດັບຂອງທະນາຄານໂລກ ແລະ ຕົວຊີ້ວັດດ້ານການຄ້າລະຫວ່າງຊາຍແດນທີ່ເປັນສ່ວນປະກອບຂອງດັດຊະນີການດຳເນີນທຸລະກິດທີ່ທະນາຄານໂລກໄດ້ຕີລາຄາ ຊີ້ໃຫ້ເຫັນຢ່າງເດັ່ນຊັດເຖິງຄວາມຈຳເປັນໃນການສືບຕໍ່ຈັດຕັ້ງປະຕິບັດແຜນດຳເນີນງານການອຳນວຍຄວາມສະດວກດ້ານການຄ້າ, ຕັດຮອນ ແລະປັບປຸງລະບຽບການໃຫ້ກະທັດຮັດງ່າຍດາຍ ແລະ ເສີມສ້າງຂີດຄວາມສາມາດ ຂອງພາກລັດ ແລະ ພາກເອກະຊົນ. ດັດຊະນີຊີ້ວັດປະສິດທິພາບທາງດ້ານໂລຊິດສະຕິກ (LPI) ທີ່ທະນາຄານໂລກມີການຈັດອັນດັບປະເທດຕ່າງໆກ່ຽວກັບຫລາຍໆມາດຕະການອຳນວຍຄວາມສະດວກທາງດ້ານການຄ້າ ໂດຍອີງໃສ່ຄວາມເຂົ້າໃຈຂອງຜູ້ໃຊ້ໃນພາກທຸລະກິດ. ຮູບທີ 5.1 ສະແດງໃຫ້ເຫັນວ່າ ສປປ ລາວ ປະຕິບັດໄດ້ຕ່ຳກວ່າຄູ່ຄ້າທີ່ສຳຄັນໃນພາກພື້ນຢ່າງຕໍ່ເນື່ອງ ຄື: ໄທ ແລະ ຫວຽດນາມ; ໃນປີ 2018, ສປປ ລາວ ຢູ່ໃນອັດຕາ 64 ສ່ວນຮ້ອຍ ທຽບກັບ ເຢຍລະມັນ ເຊິ່ງເປັນປະເທດອັນດັບໜຶ່ງ. ເຖິງວ່າໄດ້ມີການປັບປຸງເລັກນ້ອຍໃນໄລຍະປີ 2010 ຫາ 2018, ສັງເກດເຫັນໄດ້ວ່າ ດັດຊະນະດັ່ງກ່າວຂອງ ສປປ ລາວ ແມ່ນຫຼຸດລົງໃນລະຫວ່າງປີ 2012 ຫາ 2016. ຮູບ 5.2 ສະແດງໃຫ້ເຫັນການວັດປະສິດທິພາບທາງ ຂອງ ສປປ ລາວ, ສົມທຽບໃສ່ກັບບາງປະເທດໃນພາກພື້ນ, ຕາມສ່ວນປະກອບ 6 ຕົວ ຂອງ LPI: (i) ລະບຽບການທາງພາສີ, (ii) ພື້ນຖານໂຄງລ່າງ, (iii) ການກຽມການຂົນສົ່ງ/ຈັດສົ່ງສິນຄ້າລະຫວ່າງປະເທດ, (iv) ສະມັດຖະນະຜູ້ໃຫ້ບໍລິການໂລຊິດສະຕິກທັງພາກລັດແລະທຸລະກິດ (ຄຸນນະພາບ ແລະ ຄວາມສາມາດດ້ານໂລຊິດສະຕິກ), (v) ລະບົບການຕິດຕາມ ແລະ ກວດສອບສິນຄ້າ(ເພື່ອຮູ້ໄດ້ວ່າສິນຄ້າສົ່ງຮອດໃສແລ້ວ), (vi) ຄວາມຕົງຕໍ່ເວລາຂອງການບໍລິການ. ໃນປີ 2018, ການວັດປະສິດທິພາບຂອງ ສປປ ລາວ ໃນແຕ່ລະຕົວຊີ້ວັດຂອງ LPI ແມ່ນຍັງຕ່ຳກວ່າມາເລເຊຍ, ໄທ, ແລະ ຫວຽດນາມມາຕະຫລອດ ແລະ ທຽບກັບກຳປູເຈຍແມ່ນສູງກວ່າເລັກນ້ອຍ, ຍົກເວັ້ນຄວາມຕົງຕໍ່ເວລາຂອງການບໍລິການ ເຊິ່ງ ສປປ ລາວ ຢູ່ໃນອັນດັບຕ່ຳກວ່າຫລາຍ.

**ຮູບທີ 5.1 ດັດຊະນີຊີ້ວັດປະສິດທິພາບທາງດ້ານໂລຊິດສະຕິກ , ສປປ ລາວ ແລະ ບາງປະເທດທີ່ເລືອກເຟັ້ນມາ 2010-2018**




*ແຫລ່ງທີ່ມາ: ໄດ້ຈາກທະນາຄານໂລກ, ດັດຊະນີຊີ້ວັດປະສິດທິພາບທາງດ້ານໂລຊິດສະຕິກ https://lpi.worldbank.org/*

## ຮູບທີ 5.2 ປະສິດທິພາບທາງດ້ານໂລຊິດສະຕິກ ຕາມດັດຊະນີຊີ້ວັດດັ່ງກ່າວ, ລຳດັບທີຂອງຕົວຊີ້ວັດ, 2018




*ແຫລ່ງທີ່ມາ: ໄດ້ຈາກທະນາຄານໂລກ, ດັດຊະນີການວັດປະສິດທິພາບທາງດ້ານໂລຊິດສະຕິກ https://lpi.worldbank.org/*

168. **ດັດຊະນີຊີ້ວັດປະສິດທິພາບທາງດ້ານໂລຊິດສະຕິກ ສະແດງໃຫ້ເຫັນວ່າ ສປປ ລາວ ຍັງຢູ່ອັນດັບຫລັງໆຂອງບັນດາຄູ່ຄ້າລາຍໃຫຍ່ຂອງຕົນ.** ຕົວຊີ້ວັດປະສິດທິພາບທາງດ້ານໂລຊິດສະຕິກ LPI ສະ ແດງໃຫ້ເຫັນວ່າ ການຈັດຕອງໂສການສະໜອງໃນ ສປປ ລາວ ມີຕົ້ນທຶນທີ່ສູງກວ່າ ແລະ ມີຂອບພູນວງນດ້ານເວລາຊ້າກວ່າເມື່ອທຽບໃສ່ກັບບັນດາປະເທດໃກ້ຄຽງສອນໃຫຍ່. ໂລຊິດສະຕິກ ແມ່ນກຽວຂ້ອງກັບການຄຸ້ມຄອງລະບົບຕອງໂສການສະໜອງ, ບ່ອນທີ່ການແຂ່ງຂັນແມ່ນຖືກກຳນົດໂດຍຄວາມໜ້າເຊື່ອຖືແລະປະສິດທິພາບຂອງພື້ນຖານໂຄງລາງຂອງການຂົນສົ່ງ, ບໍລິສັດຂົນສົ່ງ, ອົງກອນຄຸ້ມຄອງຊາຍແດນ, ຜູ້ຄວບຄຸມຄຸ້ມຄອງການຂົນສົ່ງ ແລະຜູ້ໃຫ້ບໍລິການດ້ານໂລຊິດສະຕິກ. ບັນດາພື້ນຖານເສດຖະກິດທີ່ມີຄວາມສາມາດແຂ່ງຂັນທີ່ດຶງດູດການລົງທຶນທີ່ສະແຫວງຫາປະສິດທິພາບ ລ້ວນແຕ່ໄດ້ສາງຂອບຂາຍດ້ານລະບຽບການທີ່ທັງພາກລັດ ແລະ ເອກະຊົນມີການເຮັດວຽກຮ່ວມກັນຢ່າງມີລັກສະນະຄາດຄະເນໄດ້ ແລະ ໂປ່ງໃສ. ຕໍ່ກັບບັນຫານີ້, ຄະແນນ LPI ຂອງ ສປປ ລາວ ສະເໜີໃຫ້ເຫັນວ່າ ຕ້ອງໄດ້ປິດຊອງວ່າງດ້ານຄຸນນະພາບຂອງການບໍລິການໂລຊິດສະຕິກ ແລະ ການອຳນວຍຄວາມສະດວກທາງດ້ານການຄ້າກັບບັນດາເສດຖະກິດໃກ້ຄຽງ ຖ້າວ່າຕ້ອງການຈະດຶງດູດການລົງທຶນທີ່ບໍ່ຊອກສະແຫວງຫາຊັບພະຍາກອນ.

169. **ການຄ້າລະຫວ່າງຊາຍແດນແມ່ນຕົວຊີ້ວັດທີ່ໄດ້ອັນດັບດີສຸດຂອງ ສປປ ລາວ ໃນການດຳເນີນທຸລະກິດປີ 2020.** ການສຳຫຼວດການດຳເນີນທຸລະກິດ (DB) ປີ 2020 ໄດ້ຈັດ ສປປ ລາວ ຢູ່ອັນດັບທີ 154 ໃນຈຳນວນ 190 ປະເທດ ດ້ານຄວາມສະດວກໃນການດຳເນີນທຸລະກິດເວົ້າລວມ; ແນວໃດກໍ່ຕາມ, ການຄ້າຂາຍລະຫວ່າງຊາຍແດນແມ່ນຕົວຊີ້ວັດທີ່ໄດ້ອັນດັບດີສຸດຂອງ ສປປ ລາວ ໂດຍມີອັນດັບ 78 ແລະ ຄະແນນ “ໄລຍະຫ່າງຈາກລະດັບດີສຸດ” ແມ່ນ 78,1. ນີ້ແມ່ນຕ່ຳກວ່າຄູ່ຄ້າລາຍໃຫຍ່ ເຊັ່ນ ໄທ (62) ແລະ ຈີນ (56), ແຕ່ສູງກວ່າຫວຽດນາມ (104) ແລະ ກຳປູເຈຍ (118). ສປປ ລາວ ແມ່ນຫຼາຍກວ່າ 20 ຈຸດສ່ວນຮ້ອຍ, ອີງຕາມ “ໄລຍະຫ່າງຈາກລະດັບດີສຸດ”, ທຽບກັບບັນດາປະເທດທີ່ມີປະສິດທິພາບໃນການແຂ່ງຂັນໄດ້ດີກວ່າໝູ່ໃນການຄ້າລະຫວ່າງຊາຍແດນ. ຍັງມີຂອບເຂດທີ່ສຳຄັນໃນການຫຼຸດຕົ້ນທຶນຂອງການຄ້າ ແລະ ເວລາທີ່ຕ້ອງການໃນການແຈ້ງພາສີ ໂດຍການຈັດຕັ້ງປະຕິບັດມາດຕະການອຳນວຍຄວາມສະ ດວກທາງດ້ານການຄ້າ.

170. **ການກວດກາສິນຄ້າຕົວຈິງ ແລະ ຂັ້ນຕອນ ຂອງລະບົບລັດຖະການທີ່ຊ້ຳຊາກຍັງຄົງເປັນບັນ ຫັດຖານທີ່ປະຕິບັດກັນຢູ່ຊາຍແດນ, ການປັບປຸງໃນໄລຍະສອງປີຜ່ານມາໄດ້ຫຼຸດຜ່ອນເວລາການແຈ້ງພາສີ.** ຜົນໄດ້ຮັບເບື້ອງຕົ້ນຈາກການສຶກສາເວລາກວດປ່ອຍສິນຄ້າປີ 2020 (TRS) ຊີ້ໃຫ້ເຫັນວ່າ ເວລາສະເລ່ຍໄດ້ຫຼຸດລົງ, ນັບຈາກການຍື່ນໃບແຈ້ງພາສີຮອດການອອກໄປຂອງສິນຄ້າ, 5 ຊົ່ວໂມງ 12 ນາທີທຽບກັບ 8 ຊົ່ວໂມງ 10 ນາທີໃນປີ 2019. ອັນນີ້ບໍ່ໄດ້ກວມເອົາ ເວລາທີ່ OGAs ຕ້ອງການເພື່ອອະນຸມັດສິນຄ້າທີ່ຕ້ອງປະຕິບັດຕາມລະບຽບການດ້ານເຕັກນິກວິຊາການ (ຕົວຢ່າງເຊັ່ນ: ຜະລິດຕະພັນກະສິກຳ, ສະບຽງອາຫານ, ສານເຄມີ, ຝຸ່ນ).

**ຮູບທີ 5.3 ການດໍາເນີນທຸລະກິດ, ບັນດາຕົວຊີ້ວັດ ຂອງການຄ້າລະຫວ່າງຊາຍແດນ, ສປປ ລາວ 2016-2020**




*ແຫລ່ງທີ່ມາ: ໄດ້ຂໍ້ມູນຈາກບົດລາຍງານການດໍາເນີນທຸລະກິດຈັດຕຽມໂດຍທະນາຄານໂລກ. https://www.doingbusiness.org/en/doingbusiness*

171. **ການຫຼຸດຜ່ອນຕົ້ນທຶນດ້ານການຄ້າຈະປັບປຸງສະພາບແວດລ້ອມ ການນໍາເຂົ້າ ແລະ ສົ່ງອອກແລະສົ່ງເສີມການເຕີບໂຕ.** ການທົບທວນຄືນ, ການປັບປຸງໃຫ້ມີປະສິດທິພາບດີຂຶ້ນ, ການເຮັດໃຫ້ລະບຽບການ ແລະ ຂັ້ນຕອນງ່າຍຂຶ້ນສໍາລັບການອໍານວຍຄວາມສະດວກທາງດ້ານການຄ້າແມ່ນບູລິມະສິດທີ່ຈໍາເປັນໃນການປັບປຸງສະພາບແວດລ້ອມທີ່ເອື້ອອໍານວຍໃຫ້ແກ່ການດໍາເນີນທຸລະກິດ. ນອກຈາກນັ້ນ, ຄ່າໃຊ້ຈ່າຍສິ້ນເປືອງທີ່ສູງ ແລະການບໍລິການດ້ານໂລຊິດສະຕິກ ແລະດ້ານການຂົນສົ່ງສິນຄ້າທີ່ມີຈໍາກັດ ແລະຂໍ້ຈໍາກັດດ້ານພື້ນຖານໂຄງລ່າງ, ທັງຫມົດແມ່ນເພີ່ມໃຫ້ແກ່ຕົ້ນທຶນໃນການນໍາເຂົ້າແລະສົ່ງອອກ, ປະກອບສ່ວນເຮັດໃຫ້ມີການຊັກຊ້າແລະໄລຍະເວລາຂອງຮອບໝູນຊ້າລົງ. ຜົນໄດ້ຮັບສຸດທ້າຍແມ່ນການຢັບຢັ້ງການຄ້າຍ້ອນວ່າຕົ້ນທຶນດ້ານການຄ້າສູງເປັນການຂັດຂວາງການມີສ່ວນຮ່ວມໃນຕ່ອງໂສ້ມູນຄ່າຂອງໂລກ. ການຮັບປະກັນໃຫ້ຂັ້ນຕອນລະບຽບການການຄ້າມີຄວາມກະທັດຮັດງ່າຍດາຍ ແລະ ໂປ່ງໃສ ແມ່ນຈຸດໃຈກາງຂອງປະເພນີປະຕິບັດທີ່ດີດ້ານນະໂຍບາຍການຄ້າ, ເຊິ່ງເປັນສິ່ງຈໍາເປັນເພື່ອລະດົມການລົງທຶນຂອງເອກະຊົນ, ອັນຈະນໍາໄປສູ່ການເຕີບໂຕເສດຖະກິດແບບຍືນຍົງ, ມີຄວາມຫຼາກຫຼາຍ ແລະ ມີຄວາມສາມາດຟື້ນຕົວຢ່າງໄວວາຈາກສະພາບຫຍຸ້ງຍາກໄດ້ຫລາຍຂຶ້ນ. ລະບົບບໍລິຫານທີ່ມີພິທີລີຕອງເກີນໄປ ເຊິ່ງສຸມໃສ່ການຄວບຄຸມແທນທີ່ຈະແມ່ນການອໍານວຍຄວາມສະດວກຈະກີດໜ່ວງການຄ້າ ແລະ ຂັດຂວາງການລົງທຶນ, ຊຸກຍູ້ໃຫ້ເກີດມີພຶດຕິກໍາສວຍໃຊ້ໜ້າທີ່ຕໍາແໜ່ງເພື່ອຫາຜົນປະໂຫຍດສ່ວນຕົວ ແລະຂັດຂວາງການເຕີບໂຕຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ.

## 5.2 ໂລຊິດສະຕິກ ແລະ ການຂົນສົ່ງ

172. **ການບໍລິການດ້ານໂລຊິດສະຕິກ ຂອງ ສປປ ລາວ ມີຕົ້ນທຶນສູງ, ຄຸນນະພາບຂ້ອນຂ້າງຕໍ່າ ແລະ ໃຫ້ບໍລິການໃນຂອບເຂດຈໍາກັດ.** ເມື່ອປຽບທຽບກັບເສດຖະກິດອາຊຽນອື່ນໆ ຕົ້ນທຶນດ້ານໂລຊິດສະຕິກຂອງສປປ ລາວ ແມ່ນເທົ່າກັບສອງເທື່ອຂອງປະເທດອື່ນ. ຕົ້ນທຶນດ້ານໂລຊິດສະຕິກສູງຈະເຮັດໃຫ້ນັກລົງທຶນຕ່າງປະເທດທໍ້ຖອຍ, ເຮັດໃຫ້ການແຂ່ງຂັນຫຼຸດລົງ ແລະສົ່ງຜົນເຮັດໃຫ້ມີມາດຕະຖານການຄອງຊີບຕໍ່າ. ຄວາມຈໍາກັດດ້ານພື້ນຖານໂຄງລ່າງ ດ້ານວັດຖຸເຕັກນິກກໍພຽງເປັນເຫດຜົນສ່ວນໜຶ່ງທີ່ເຮັດໃຫ້ມີຕົ້ນທຶນສູງ; ປັດໄຈປະກອບສ່ວນອື່ນໆ ແມ່ນຂໍ້ຈໍາກັດດ້ານລະບຽບການ ທີ່ຈໍາກັດບໍລິສັດໃໝ່ ໃນການເຂົ້າສູ່ຕະຫລາດ ແລະ ສິ່ງທ້າທາຍດ້ານການອໍານວຍຄວາມສະດວກທາງດ້ານການຄ້າ.

173. **ການລົງທຶນໃນພື້ນຖານໂຄງລ່າງການຂົນສົ່ງດ້ານວັດຖຸເຕັກນິກຮຽກຮ້ອງໃຫ້ມີການລົງທຶນເສີມໃນໂຄງລ່າງພື້ນຖານປະເພດການບໍລິການທາງອ້ອມ ຫຼື ໂຄງບິນ** (ເຊັ່ນ ສຶກສາ, ສາທາ, ການເງິນ, ການບໍລິການຂອງພາກລັດ ລວມທັງການບັງຄັບໃຊ້ກົດໝາຍ) ເພື່ອຮັບໃຊ້ດ້ານການບໍລິການໂລຊິດສະຕິກ ແລະ ການຂົນສົ່ງ. ການພັດທະນາພື້ນຖານໂຄງລ່າງດ້ານວັດຖຸເຕັກນິກ, ລວມທັງເສັ້ນທາງທີ່ສັນຈອນໄດ້ທຸກລະດູການ, ຂົວ ແລະ ອຸໂມງ ແລະວິທີການຖ່າຍໂອນສໍາລັບການເຊື່ອມຕໍ່ທາງລົດໄຟ, ຕ້ອງໄດ້ຮັບການສົມທົບກັບການສ້າງສະພາບແວດລ້ອມທີ່ເອື້ອອໍານວຍແກ່ການບໍລິການດ້ານໂລຊິດສະຕິກ ແລະການຂົນສົ່ງ. ການເຊື່ອມຕໍ່ເສັ້ນທາງລົດໄຟມີທ່າແຮງໃນການເຊື່ອມໂຍງຂອງ ສປປ ລາວ, ໂດຍຜ່ານການຫຼຸດຜ່ອນຕົ້ນທຶນດ້ານການຄ້າ, ທັງໃນຕະຫຼາດພາກພື້ນ ແລະ ຕະຫລາດໂລກ. ການບໍລິການດ້ານໂລຊິດສະຕິກທີ່ມີປະ ສິດທິພາບແມ່ນມີຄວາມຈໍາເປັນໃນການຊຸກຍູ້ຄວາມສາມາດໃນການແຂ່ງຂັນ ແລະ ຄວາມໜ້າດຶງດູດໂດຍ ລວມຂອງ ສປປ ລາວ ເພື່ອໃຫ້ກາຍເປັນທໍາເລທີ່ຕັ້ງຂອງການລົງທຶນຂອງ GVC ໂດຍຜ່ານການເຮັດໃຫ້ເກີດການນໍາເຂົ້າວັດຖຸປະກອນ,

ຜະລິດຕະພັນເຄິ່ງສຳເລັດຮູບ ແລະ ສິນຄ້າອຸປະໂພກ-ບໍລິໂພກ, ການຈໍລະຈອນແຈກຢາຍພາຍໃນ ແລະ ການສົ່ງອອກສິນຄ້າເຄິ່ງສຳເລັດຮູບ ແລະ ສິນຄ້າສຳເລັດຮູບໃຫ້ມີປະສິດທິພາບຫຼາຍຂຶ້ນ.

174. **ລານຕູ້ສິນຄ້າ (ສາງຄຸ່ງນຖ່າຍຄອນເຕັນເນີພາຍໃນປະເທດ) (ICD) ມີບົດບາດສຳຄັນໃນການຫຼຸດຜ່ອນຕົ້ນທຶນທາງການຄ້າ.** ICDs ແມ່ນຈຸດຫມາຍປາຍທາງພາຍໃນປະເທດທີ່ກໍານົດຂຶ້ນເພື່ອໃຫ້ເປັນບ່ອນແຈ້ງພາສີສໍາລັບສິນຄ້ານໍາເຂົ້າ ແລະ ສົ່ງອອກ. ໃນນີ້ ອາດຈະມີສິ່ງອໍານວຍຄວາມສະດວກປະເພດສາງເກັບສິນຄ້າ, ລະບົບສາງເຢັນ, ຕູ້ຄອນເທນເນີ ແລະການຍົກຖ່າຍສິນຄ້າເຄື່ອງຂອງ, ມີສະຖານທີ່ບາງທີບທໍ່ ຂອງສິນຄ້າ ແລະ ຫຸ້ມຫໍ່ສິນຄ້າຄືນໃໝ່, ກິດຈະການນາຍຫນ້າການລໍາລຽງຂົນສົ່ງທາງບົກ, ການຕິດຕາມສິນຄ້າ ແລະການບໍລິການດ້ານໂລຊິດສະຕິກອື່ນໆທີ່ຫລາກຫລາຍ. ແຜນພັດທະນາດ້ານໂລຊິດສະຕິກແຫ່ງຊາດຂອງ ສປປ ລາວ ໄລຍະ 2016-2025 ໄດ້ກໍານົດວ່າການພັດທະນາດ້ານການບໍລິການໂລຊິດສະຕິກທີ່ມີຈໍາກັດວ່າເປັນສິ່ງທ້າທາຍໃຫຍ່; ໄດ້ວາງເປົ້າໝາຍເພື່ອປະຕິບັດໃຫ້ເປັນຈິງໃນການບໍລິການເຊື່ອມຈອດທີ່ມີປະສິດທິພາບ ແລະ ປະສິດທິຜົນສູງ, ໂດຍໃຫ້ມີຂະແໜງຂົນສົ່ງສິນຄ້າ ແລະ ໂລຊິດສະຕິກຂອງພາຍໃນປະເທດມີສາມາດແຂ່ງຂັນໄດ້ ແລະ ຍືນຍົງ ກ່ອນປີ 2030.

## ຕາຕະລາງ 5.1. ICDs ທີ່ຖືກສະເໜີຊື່

1. ທ່ານາແລ້ງ, ວຽງຈັນ
2. ນາເຕີຍ, ຫລວງນໍ້າທາ
3. ສະຫວັນນະເຂດ, ສະຫວັນນະເຂດ
4. ຫ້ວຍຊາຍ, ບໍ່ແກ້ວ
5. ຫລັກຊາວ, ບໍລິຄໍາໄຊ
6. ຫລວງພະບາງ, ຫລວງພະບາງ
7. ອຸດົມໄຊ, ເມືອງໄຊ
8. ປາກເຊ,ຈໍາປາສັກ
9. ທ່າແຂກ, ຄໍາມ່ວນ

175. **ICDs ຄວນເຊື່ອມຕໍ່ກັບແລວທາງການຂົນສົ່ງທີ່ສໍາຄັນ ແລະ ຈໍາເປັນຕ້ອງໄດ້ຕື່ມເສີມໃຫ້ແກ່ແຜນດໍາເນີນງານການອໍານວຍຄວາມສະ ດວກດ້ານການຄ້າ.** ແຜນພັດທະນາດ້ານໂລຊິດສະຕິກໄດ້ຄາດການຈະໃຫ້ມີອຸທິຍານດ້ານໂລຊິດສະຕິກສາກົນ 3 ແຫ່ງ (ນະຄອນຫຼວງວຽງຈັນ, ຫຼວງນໍາທາ ແລະ ສະຫວັນນະເຂດ) ແລະ ອຸທິຍານການດ້ານໂລຊິດສະຕິກຂອງພາກພື້ນ 6 ແຫ່ງ ຕາມຊາຍແດນລາວ-ຫວຽດນາມ ແລະ ລາວ-ໄທ. ແຜນການດັ່ງກ່າວຍັງໄດ້ສະເໜີຊື່ ICD 9 ແຫ່ງ ພາຍໃຕ້ສັນຍາທີ່ຕົກລົງກັນລະຫວ່າງລັດຖະບານກຽວກັບທາບົກ. ບົດລາຍງານຂອງທະນາຄານໂລກ, ຈາກປະເທດບໍ່ມີຊາຍແດນຕິດທະເລ ໄປສູ່ປະເທດດິນຕໍ່ແຜ່ນ(ເຊື່ອມຕໍ່): ການເປີດນໍາໃຊ້ທ່າແຮງຂອງການເຊ ຈອດທາງລົດໄຟລາວ-ຈີນ (2020) ມີຂໍ້ສັງເກດວ່າ, ວິທີທີ່ຮອບຄອບຄືຄວນໃຫ້ມີ ICDs ບໍ່ເກີນ 9 ແຫ່ງ ເພື່ອຮັບປະກັນໃຫ້ ເຂົາເຈົ້າມີກໍາໄລ, ອີງຕາມລະດັບການຈະລາຈອນທີ່ໄດ້ຄາດໄວ້.

176. **ການສ້າງ ICD ຢ່າງໜ້ອຍສອງແຫ່ງຢູ່ຈຸດທີ່ຫລາຍເສັ້ນທາງຕັດຜ່ານ ສໍາລັບການເຊື່ອມຕໍ່ທາງລົດໄຟຄວນຈະເປັນບຸລິມະສິດ.** ອັນນີ້ແມ່ນສິ່ງຈໍາເປັນສໍາລັບການຮັບປະກັນການຂົນຍ້າຍສິນຄ້າມີປະສິດທິຜົນສໍາລັບຕູ້ຄອນເທນເນີ, ໂດຍມີຄວາມສາມາດໃນການຈັດຫາການຂົນສົ່ງລະຫວ່າງຮູບແບບທີ່ມີປະສິດທິ ພາບເພື່ອຂຽນຖ່າຍລະຫວ່າງການຂົນສົ່ງທາງບົກ ແລະທາງລົດໄຟ. ໃນຂະນະທີ່ມາດຕະການອໍານວຍຄວາມສະດວກທາງດ້ານການຄ້າທີ່ວາງແຜນໄວ້ຈະຈໍາກັດບົດບາດຂອງ ICDs ໃນຂະບວນການແຈ້ງພາສີ, ພາສີຈະຕ້ອງໄດ້ປະຕິບັດຕາມໄປພ້ອມໆກັບການບໍລິການດ້ານໂລຊິດສະຕິກອື່ນໆ.

## ກ່ອງເນື້ອຄວາມ ທີ 5.2 ລານຕູ້ສິນຄ້າ ຂອງ ສປປ ລາວ

177. **ສ້າງຕັ້ງ ICDs ໃຫ້ເປັນສິ່ງອໍານວຍຄວາມສະດວກເພື່ອໃຫ້ນໍາໃຊ້ໄດ້ທົ່ວໄປ.** ມີຂໍ້ແນະນໍາວ່າ ICDs ຄວນເພື່ອເອີ້ໄວ້ໃຫ້ມີຫຼາຍບໍລິສັດ, ລວມທັງການເປີດໃຫ້ສາທາລະນະໄດ້ເຂົ້າເຖິງ. ການອະນຸຍາດໃຫ້ມີການແຂ່ງຂັນກັນລະຫວ່າງຜູ້ປະກອບການດ້ານໂລຊິດສະຕິກ ແລະ ດ້ານການຂົນສົ່ງພາຍໃນ ICD ຈະຊຸກຍູ້ໃຫ້ການບໍລິການດ້ານໂລຊິດສະຕິກ ແລະ

- ICD ແຫ່ງທໍາອິດໄດ້ສ້າງຕັ້ງຂຶ້ນໃນເດືອນຕຸລາ 2017 ທີ່ແຂວງສະຫວັນນະເຂດຕາມແລວທາງ GMS EWEC ແລະເຮັດຫນ້າທີ່ເປັນສະຖານີປາຍທາງບົນບົກ ເຊິ່ງເປັນສະຖານທີ່ແຈ້ງພາສີໃຫ້ແກ່ ເຂດເສດຖະກິດພິເສດ ສະຫວັນ-ເຊໂນ.
- ໃນເດືອນພະຈິກ 2017 ກິດຈະການຮ່ວມທຶນແບບຮຸ້ນສ່ວນລັດກັບເອກະຊົນ PPP ລະຫວ່າງ ລັດວິສາຫະກິດ ໂລຊິດສະຕິກ ແລະ TZ ICD ລາວ-ຈີນ ໄດ້ຕົກລົງຮັບສໍາປະທານ 28 ປີ ຢູ່ດ່ານສາກົນບໍ່ເຕນ ເຊິ່ງເລີ່ມປະຕິບັດໃນປີ 2019. ເມື່ອທາງລົດໄຟເປີດດໍາເນີນການ, ກໍຈະເປັນການສະໜອງສິ່ງອໍານວຍຄວາມສະດວກ ແລະ ອຸປະກອນຕ່າງໆ ສໍາລັບການຂຽນຖ່າຍສິນຄ້າລະຫວ່າງຮູບແບບການຂົນສົ່ງ ແລະ ICD ຄາດວ່າຈະຈັດໃຫ້ມີສາງສິນຄ້າສໍາລັບການຄ້າຜ່ານທາງເອເລັກໂຕຣນິກຂ້າມຊາຍແດນ. ຄາດວ່າຄູ່ຮ່ວມຝ່າຍຈີນ ຈະຖ່າຍທອດຄວາມຮູ້ກຽວກັບການດໍາເນີນງານດ້ານໂລຊິດສະຕິກທາງລົດໄຟ.
- ໄດ້ມີການອອກແຈ້ງການການລົງທຶນສ້າງ ICD ທີ່ສໍາຄັນຄັ້ງທໍາອິດ ໃນເດືອນມີນາ 2021. ລັດຖະບານໄດ້ອະນຸມັດສັນຍາສໍາປະທານ 50 ປີ ສໍາລັບການກໍ່ສ້າງລະບົບໂລຊິດສະຕິກແບບມີແຜນຈະສ້າງສິ່ງອໍານວຍຄວາມ

ສະດວກຄົບວົງຈອນ, ໂດຍບໍລິສັດວຽງຈັນໂລຊິດສະຕິກພາກ Vientiane Logistics Park ຈໍາກັດ (VLP) ແລະ ບໍລິສັດ ສິດທິໂລຊິດສະຕິກລາວ ເປັນຜູ້ດໍາເນີນການກໍ່ສ້າງ, ດໍາເນີນກິດຈະການ ແລະ ມອບໂອນ ແບບ (BOT), ຢູ່ທີ່ ICD ທານາແລ້ງສ່ວນຂະຫຍາຍ ແລະ ຂອງໂລຊິດສະຕິກພາກ ຂອງກະຣີນຟີແອລ Greenfield Vientiane logistics park. ທານາແລ້ງຈະເປັນບ່ອນຈອດສຸດທ້າຍຂອງການເດີນທາງຂອງເສັ້ນລົດໄຟ ລາວ-ຈີນ ແລະ ເປັນຈຸດເຊື່ອມຕໍ່ຫຼັກໄປຫາພາກໃຕ້ຂອງໄທໂດຍທາງຖະໜົນ ແລະເປັນສະຖານທີ່ໆສາມາດຂົນຖ່າຍສິນຄ້າໄປສູ່ເຄືອຂ່າຍລົດໄຟຂອງໄທ. IFC ຈະໃຫ້ການຊ່ວຍເຫຼືອດ້ານວິຊາການສໍາລັບການອອກແບບແລະການຈັດຫາເງິນທຶນ ໂດຍສອດຄ່ອງກັບປະເພນີປະຕິບັດຊັ້ນນໍາທາງອຸດສາຫະກໍາ, ສິ່ງແວດລ້ອມ ແລະ ສັງຄົມ. ຍັງບໍ່ທັນເປັນທີ່ຈະແຈ້ງເທື່ອວ່າ ສັນຍາສໍາປະທານດັ່ງກ່າວຈະອະນຸຍາດໃຫ້ມີຫຼາຍໆບໍລິສັດດ້ານໂລຊິດສະຕິກ ແລະຂົນສົ່ງ ຫລື ບໍ່.

ດ້ານການຂົນສົ່ງມີປະສິດທິພາບກວ່າເກົ່າ. ສິ່ງນີ້ອາດຈະເປັນສິ່ງທ້າທາຍໃນໄລຍະສັ້ນ, ຍ້ອນວ່າບໍລິສັດທີ່ລົງທຶນໃນການກໍ່ສ້າງ ICD ຈະສົນໃຈໃນການເກັບກູ້ທຶນ ຂອງຕົນຄືນໂດຍຜ່ານການຂາຍບໍລິການດ້ານໂລຊິດສະຕິກ; ຢ່າງໃດກໍດີ, ການຈໍາກັດການແຂ່ງຂັນກໍຄວນມີກໍານົດເວລາ.

178. **ຜູ້ປະກອບການດ້ານໂລຊິດສະຕິກ ແລະ ດ້ານການຂົນສົ່ງສິນຄ້າ ຂອງ ສປປ ລາວ ມີຂອບເຂດການໃຫ້ບໍລິການທີ່ຈໍາກັດ.** ບໍ່ມີຜູ້ດໍາເນີນການໆຂົນສົ່ງຫລາຍຮູບແບບ ທີ່ໃຫ້ບໍລິການຈາກປະຕູເຮືອນເຖິງປະຕູເຮືອນໃນຕະຫລອດຊ່ວງຮອບວຽນຂອງການຈັດສົ່ງທັງຫມົດ. ຂະໜາດຕະຫຼາດລວມຄາດວ່າຈະບັນລຸໄດ້ 695 ລ້ານໂດລາສະຫະລັດຮອດປີ 2023. ຜູ້ໃຫ້ບໍລິການດ້ານໂລຊິດສະຕິກທີ່ມີໃນ ສປປ ລາວ ຕົກຢູ່ໃນ 3 ປະເພດຄື: ມີປະມານ 24 ວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງທີ່ດໍາເນີນທຸລະກິດຢູ່ໃນຂອບຂອງສະມາຄົມຜູ້ຈັດສົ່ງສິນຄ້າລະຫວ່າງປະເທດ ຂອງ ສປປ ລາວ (LIFFA); ຜູ້ສໍາປະທານລາຍໃຫຍ່ (ຜູ້ທີ່ຄຸ້ມຄອງ ICDs) ແລະ ມີກອງພາຫະນະຂົນສົ່ງເປັນຂອງຕົນເອງ; ແລະກິດຈະການຮ່ວມທຶນລະຫວ່າງນັກລົງທຶນພາຍໃນປະເທດແລະບໍລິສັດໂລຊິດສະຕິກຕ່າງປະເທດ.

179. **ຜູ້ໃຫ້ບໍລິການຢູ່ທ້ອງຖິ່ນຮູ້ຈັກບັນດາອົງການຈັດຕັ້ງ ແລະ ລະບຽບການຕ່າງໆໃນທ້ອງຖິ່ນ ແຕ່ບໍ່ມີຄວາມຊໍານານໃນການໃຫ້ບໍລິການດ້ານໂລຊິດສະຕິກແບບຫລາຍຮູບແບບທີ່ຄົບວົງຈອນ.** ສະມາຊິກ LIFFA, ສ້າງຕັ້ງຂຶ້ນໂດຍຂໍ້ຕົກລົງຂອງກະຊວງ (ໃນປີ 2001), ປະກອບມີຜູ້ຈັດສົ່ງສິນຄ້າ, ບໍລິສັດຂົນສົ່ງທາງບົກ ແລະ ຜູ້ບໍລິການແຈ້ງພາສີ. ໂດຍທົ່ວໄປສະມາຊິກຂອງ LIFFA ແມ່ນກວມເອົາສ່ວນໃຫຍ່ໃນບັນດາວຽກງານດັ່ງຕໍ່ໄປນີ້: ການແຈ້ງພາສີສໍາລັບສິນຄ້ານໍາເຂົ້າທີ່ມາໃນຕູ້ຄອນເທັນເນີ, ການຂົນສົ່ງ, ການຂົນສິນຄ້າລົງລົດ, ການຍົກຖ່າຍ ແລະ ນໍາສິນຄ້າທົ່ວໄປໄປແຈ້ງພາສີ, ການສົ່ງອອກທາງອາກາດ ແລະ ທາງທະເລ, ແລະ ການແຈ້ງພາສີຜ່ານແດນສໍາລັບລົດບັນທຸກພາຍໃນທີ່ຂົນສິນຄ້າຜ່ານແດນຕາມແລວທາງ EWEC ແລະ ລົດບັນທຸກຂອງຕ່າງປະເທດຕາມແລວເສດຖະກິດເໜືອ-ໃຕ້. ສະມາຊິກ LIFFA ແມ່ນສະມາຊິກທີ່ເຂັ້ມແຂງທີ່ສຸດ ແລະ ມີອິດທິພົນທີ່ສຸດໃນຂະແໜງຂົນສົ່ງ ຂອງ ສປປ ລາວ; ມີສອງອະດີດລັດວິສາຫະກິດ ຄື ວິສາຫະກິດຮຸ້ນສ່ວນຂົນສົ່ງ SMT ແລະ ວິສາຫະກິດຈັດສົ່ງສາກົນ Lao Freight Forwarder ແມ່ນມີອິດທິພົນທີ່ສຸດ. ສະພາການຄ້າລາວໄດ້ກໍານົດວ່າຂະໜາດຕະຫຼາດແມ່ນຍັງບໍ່ກວ້າງ ແລະ ພຶດຕິກໍາແບບສົມຮູ້ຮ່ວມຄິດກໍເປັນປັດໃຈສໍາຄັນທີ່ຈໍາກັດການແຂ່ງຂັນ.

180. **ຂະແໜງຂົນສົ່ງສິນຄ້າທາງລົດ ຂອງ ສປປ ລາວ ມີຜະລິດຕະພາບຕໍ່າ.** ຂະແໜງຂົນສົ່ງທາງລົດຂອງ ສປປ ລາວແມ່ນມີຂະໜາດນ້ອຍ ໂດຍມີພຽງ 12 ວິສາຫະກິດ ທີ່ມີລົດບັນທຸກຫຼາຍກວ່າ 50 ຄັນຕໍ່ໜຶ່ງວິສາຫະກິດ ແລະ ວິສາຫະກິດທີ່ມີລົດບັນທຸກໜ້ອຍກວ່າ 5 ຄັນ (Ksoll, 2018) ແມ່ນມີຈໍານວນຫລາຍກວ່າ ຄື 50 ຫົວໜ່ວຍ. ອຸດສາຫະກໍາດັ່ງກ່າວບໍ່ມີປະສິດທິຜົນ, ໂດຍລົດບັນທຸກແຕ່ລະຄັນແລ່ນສະເລ່ຍໄດ້ແຕ່ 55.000 ກິໂລແມັດຕໍ່ປີ. ອັນນີ້ປຽບທຽບກັບໄລຍະ 128.000 - 176.000 ກິໂລແມັດສໍາລັບຄົນຂັບລົດບັນທຸກຜູ້ໜຶ່ງໃນອາເມຣິກາເໜືອ[24].

181. **ຂໍ້ຈໍາກັດດ້ານລະບຽບການຕໍ່ກັບຜູ້ໃຫ້ບໍລິການດ້ານໂລຊິດສະຕິກ ຂອງຕ່າງປະເທດ ເຮັດໃຫ້ຕົ້ນທຶນຄ່າໃຊ້ຈ່າຍສູງຂຶ້ນ ແລະ ເປັນການຈໍາກັດການບໍລິການ.** ສປປ ລາວ ບໍ່ອະນຸຍາດໃຫ້ຜູ້ປະກອບການດ້ານໂລຊິດສະຕິກລະຫວ່າງປະເທດເຂົ້າມາໃຫ້ບໍລິການຂອງຕົນ ເວັ້ນເສຍແຕ່ວ່າເຂົາເຈົ້າຫາກສ້າງຕັ້ງກິດຈະ ການຮ່ວມທຸລະກິດກັບບໍລິສັດຈົດທະບຽນຂອງ ສປປ ລາວ. ວິສາຫະກິດສາກົນພົບເຫັນວ່າການສ້າງຕັ້ງກິດຈະການຮ່ວມທຸລະກິດແມ່ນຫຍຸ້ງຍາກ ແລະ ມີຄ່າໃຊ້ຈ່າຍຫຼາຍ. ອັນນີ້ສົ່ງຜົນໃຫ້ຫຼາຍບໍລິສັດສາກົນເລືອກຈ້າງເອົາວິສາຫະກິດທີ່ຈົດທະບຽນຢູ່ ສປປ ລາວ, ເຮັດໃຫ້ຕົ້ນທຶນສູງຂຶ້ນ ແລະ ການບໍລິການກໍ່ຍິ່ງຈໍາກັດໄປຕື່ມ.

182. **ຄ່າຂົນສົ່ງຕາມແລວທາງຂົນສົ່ງຫຼັກ ເມື່ອທຽບໃສ່ກັບປະເທດໄທ ຄາດຄະເນວ່າສູງກວ່າ 1,4 ຫາ 2,2 ເທົ່າຕົວ.** Ksoll (2018) ຄາດຄະເນວ່າຜູ້ປະກອບການໃນ ສປປ ລາວ ຈະຕ້ອງເສຍຄ່າຂົນສົ່ງສະເລ່ຍ 489 ກີບຕໍ່ໂຕນ-ກມ (ເທົ່າກັບ 0,06 ໂດລາຕໍ່ໂຕນ-ກມ). ບໍລິສັດຂົນສົ່ງສ່ວນໃຫຍ່ດໍາເນີນການຢູ່ໃນຂອບເຂດຂອງ $ 0,028 ແລະ $ 0,07 ຕໍ່ໂຕນກິໂລແມັດ, ໂດຍມີຕົ້ນທຶນປ່ຽນແປງທີ່ກວມເອົາປະມານ 60 ສ່ວນຮ້ອຍ. ລາຄາທີ່ຜູ້ຂົນສົ່ງຈ່າຍ ໂດຍສະເລ່ຍ $0,37 ຕໍ່ໂຕນ/ກິໂລແມັດ, ປະມານ 6 ເທື່ອ ຂອງຕົ້ນທຶນສະເລ່ຍ. ລາຄາມີຄວາມແຕກຕ່າງກັນຂຶ້ນກັບວ່າສິນຄ້າເຕັມລົດບັນທຸກ ຫຼືວ່າບໍ່ເຕັມລົດ. ການມີສິນຄ້າຂົນທັງຂາໄປແລະກັບທີ່ເຫັນວ່າຍັງມີຈໍາກັດ ກໍເປັນສາເຫດໜຶ່ງທີ່ປະກອບສ່ວນຕໍ່ການເພີ່ມຂຶ້ນຂອງລາຄາຄ່າຂົນສົ່ງ. ນອກນັ້ນ, ຍັງມີການຜັນແປຂອງລາຄາລະຫວ່າງເສັ້ນທາງພາກໃຕ້ ແລະ ພາກເໜືອ, ເຊິ່ງເສັ້ນ ທາງລະຫວ່າງຫຼວງພະບາງ ແລະ ນະຄອນຫຼວງວຽງຈັນ ແມ່ນມີລາຄາແພງທີ່ສຸດ. ບໍ່ມີຂໍ້ມູນແຍກຕ່າງຫາກກ່ຽວກັບຕົ້ນທຶນຄ່າໃຊ້ຈ່າຍໃນດ້ານໂລຊິດສະຕິກ, ເຖິງແມ່ນວ່າຜູ້ໃຫ້ບໍລິການຢູ່ທ້ອງຖິ່ນມີການກ່າວວ່າຕົ້ນທຶນຄ່າໃຊ້ຈ່າຍຂອງເຂົາເຈົ້າສູງຂຶ້ນ

ຍ້ອນກົດລະບຽບແລະຂັ້ນຕອນທີ່ຫຍຸ້ງຍາກ ຂອງຫຼາຍຂະແໜງການຂອງລັດທີ່ເຂົ້າຫຍຸ້ງກ່ຽວໃນການຄຸ້ມຄອງການຄ້າ.

183. **ສ້າງນະໂຍບາຍສົ່ງເສີມສຳລັບການຂົນສົ່ງຫລາຍຮູບແບບ ທີ່ມີປະສິດທິພາບ ແລະ ການບໍລິການໂລຊິດສະຕິກ ຢ່າງເຕັມຮູບແບບ.** ການຍົກເລີກຂໍ້ຈຳກັດການເປັນເຈົ້າຂອງຂອງວິສາຫະກິດດ້ານໂລຊິດສະ ຕິກ ແລະການເປີດໃຫ້ສາທາລະນະຊົນສາມາດການເຂົ້າເຖິງຈຸດຂົ້ນເຄື່ອງລົງເຄື່ອງຢູ່ປາຍທາງເສັ້ນທາງລົດໄຟ ແລະ ICD ຈະສົ່ງເສີມການແຂ່ງຂັນແລະຊຸກຍູ້ການມອບສົ່ງສິນຄ້າແບບຄົບວົງຈອນ ແລະ ປະຢັດຕົ້ນທຶນ. ສິ່ງນີ້ຈະເປັນຜົນປະໂຫຍດໃຫ້ແກ່ທັງຜູ້ຜະລິດພາຍໃນປະເທດແລະວິສາຫະກິດທີ່ຜະລິດເພື່ອສົ່ງອອກ. ຍ້ອນວ່າເສັ້ນທາງ ບໍ່ເຕັນ-ວຽງຈັນຍັງຈະເປັນສາຍທາງລົດໄຟເສັ້ນດຽວໃນຂະນະທີ່ຍັງລໍຖ້າການກໍ່ ສ້າງເສັ້ນທາງເຊື່ອມຕໍ່ກັບໄທ, ການດຳເນີນກິດຈະການຂົນສົ່ງຫລາຍຮູບແບບ (ທາງລົດໄຟ) ແລະ ດ້ານໂລຊິດສະຕິກຈະເປັນໃຈກາງເພື່ອຮັບປະກັນຜົນສຳເລັດຂອງເສັ້ນທາງລົດໄຟກັບຈີນ. ຂອບເຂດການບໍລິການຂົນສົ່ງຫຼາຍຮູບແບບ ແລະ ກິດຈະການໂລຊິດສະຕິກແບບມີມູນຄ່າເພີ່ມແມ່ນສະແດງໃຫ້ເຫັນຢູ່ໃນຕາຕະລາງຂ້າງລຸ່ມນີ້.

184. **ຢູ່ ສປປ ລາວ ມີພຽງບາງການບໍລິການດ້ານໂລຊິດສະຕິກທີ່ເພີ່ມມູນຄ່າ.** ຜູ້ໃຫ້ບໍລິການດ້ານໂລຊິດສະຕິກທີ່ມີຢູ່ໃນປັດຈຸບັນແມ່ນໃຫ້ບໍລິການແບບດັ້ງເດີມເຊັ່ນ: ການຈັດສົ່ງສິນຄ້າ, ການບໍລິການແຈ້ງພາສີ, ການຂົນສົ່ງທາງລົດ ແລະ ການຮັບຝາກສາງ. ການບໍລິການເພີ່ມມູນຄ່າທີ່ທັນສະໄໝຫຼາຍຢ່າງເຊັ່ນ: ການຕິດສະຫຼາກ, ການຫຸ້ມຫໍ່, ການນຳຕິດຕາມຈຸດສິນຄ້າໄປຮອດ, ແມ່ນມີຈຳກັດຫຼາຍຫຼືວ່າບໍ່ມີຊໍ້າ. ສິ່ງດັ່ງກ່າວໄດ້ຈຳກັດຄວາມສາມາດບົ່ມຊ້ອນດ້ານການເພີ່ມມູນຄ່າເພີ່ມໃຫ້ແກ່ຂະແໜງກະສິກຳ, ອຸດສາຫະກຳກະເສດ, ອຸດສາຫະກຳເບົາ ແລະ ການຄ້າ. ຄາດວ່າຄວາມຕ້ອງການການບໍລິການໂລຊິດສະຕິກຈະເພີ່ມຂຶ້ນພາຍ ຫລັງການເປີດເສັ້ນທາງລົດໄຟວຽງຈັນ-ບໍ່ເຕັນ.

## ຕາຕະລາງ 5.2 ການຂົນສົ່ງຫລາຍຮູບແບບ ແລະ ການບໍລິການດ້ານໂລຊິດສະຕິກທີ່ມີມູນຄ່າເພີ່ມ

| **ຕ່ອງໂສ້ການສະໜອງແບບເຊື່ອມໂຍງຂອງໂລກ** | |
|---|---|
| ການບໍລິການ | ຄວາມພ້ອມທີ່ຈະໃຫ້ບໍລິການໃນ ສປປ ລາວ |
| ການຂົນສົ່ງຫລາຍຮູບແບບຈາກປະຕູບ້ານຫາປະຕູບ້ານ ແບບປະສົມກົມກຽວ | ຊອກຫາບໍ່ໄດ້ |
| ການຂົນສົ່ງສິນຄ້າ | |
| ວິທີແກ້ບັນຫາການຂົນສົ່ງແຕ່ລົ້ນສຸດຫາລົ້ນສຸດ | ມີບໍລິການສ່ວນໜຶ່ງ* |
| ຜູ້ຮວບຮວມ, ຜູ້ບໍລິການແຈ້ງພາສີ, ພາສີຜ່ານແດນ, ຕົວແທນຂົນສົ່ງ | ຊອກຫາໄດ້ |
| ການຖ່າຍຖ່າຍສິນຄ້າລະຫວ່າງຮູບແບບການຂົນສົ່ງ(ທາງຖະໜົນ/ທາງລົດໄຟ/ທາງອາກາດ/ທາງນ້ຳ) | ບໍ່ມີ |
| ໂລຊິດສະຕິກແບບມີມູນຄ່າເພີ່ມ | |
| ສາງເຢັນ, ໂລຊິດສະຕິກແບບສົ່ງກັບຫລັງ(ສິນຄ້າສົ່ງຄືນ/ວັດສະດຸເພື່ອໄປຜະລິດຄືນໃໝ່) | ມີບໍລິການສ່ວນໜຶ່ງ |
| ການຮວບຮວມສິນຄ້າ ແລະ ການຄຸ້ມຄອງສິນຄ້າສຳເລັດຮູບ, ການຄວບຄຸມດູແລວັດສະດຸ, ການຫຸ້ມຫໍ່ສິນຄ້າ, ການຄຸ້ມຄອງສາງ, ການປະກັນໄພສິນຄ້າເຄື່ອງຂອງ | ຊອກຫາໄດ້ |
| ເຄື່ອງໃນສາງທີ່ຜູ້ຂາຍເປັນຜູ້ຈັດການ, ການຄຸ້ມຄອງ ແລະ ການຈັດຈຳໜ່າຍສິນຄ້າທີ່ຮັບເຂົ້າມາ, ການດຳເນີນການຈຳໜ່າຍສິນຄ້າທີ່ໄດ້ຮວມຮວມແລະຫຸ້ມຫໍ່ຈາກຜູ້ສະໜອງຫລາຍຄົນໃຫ້ຜູ້ຊົມໃຊ້ໂດຍບໍ່ຜ່ານສາງແຈກຢາຍສິນຄ້າ ແລະ ການດຳເນີນການປ່ຽນຖ່າຍສິນຄ້າ(ຮວບຮວມແລະຈັດສົ່ງສິນຄ້າ), ການຈັດໂຄງແບບ & ການຄຸ້ມຄອງລະບົບການຜະລິດຕາມການສັ່ງຊື້ຂອງລູກຄ້າ, ປະຕິບັດການຮວບຮວມຊິ້ນສ່ວນວັດສະດຸເປັນຊຸດດຽວເພື່ອສົ່ງມອບໃຫ້ຈຸດທີ່ຕ້ອງການໃຊ້ໃນສາຍພານການຜະລິດ, ການຕອບສະໜອງຄຳສັ່ງຊື້ ແລະ ການຈັດການຄຳສັ່ງຊື້, ການບໍລິຫານສິນຄ້າໃນສາງ, ການຄຸ້ມຄອງການຊອກແຫລ່ງສະໜອງ ແລະ ຜູ້ສະໜອງ | ບໍ່ມີ |

*ໝາຍເຫດ: ສຳລັບການມາຮັບເອົາສິນຄ້າ ຫລື ການສົ່ງມອບສິນຄ້າຢູ່ປາຍທາງຢ່າງດຽວ*

*ແຫລ່ງທີ່ມາ: ທະນາຄານໂລກ (2020).*

## 5.3 ຂອບຂ່າຍດ້ານການຈັດຕັ້ງອົງການ ຂອງການຂົນສົ່ງ ແລະ ໂລຊິດສະຕິກ

185. **ຊ່ອງວ່າງການຈັດຕັ້ງປະຕິບັດ, ການນຳໃຊ້ລະບຽບການທີ່ບໍ່ສະເໝີຕົ້ນສະເໝີປາຍ ແລະ ການປັບໃຫ້ທັນສະພາບ**

**ການແມ່ນຈຳເປັນ ເພື່ອເຮັດຕາມພັນທະຜູກພັນຂອງ ສປປ ລາວ ໃນອາຊຽນ.** ຂອບຂ່າຍການຈັດຕັ້ງ ແລະ ລະບຽບການຄຸ້ມຄອງການຂົນສົ່ງ ແລະ ໂລຊິດສະຕິກ ແມ່ນໜ້າທີ່ບົດບາດ ຂອງກະ ຊວງໂຍທາທິການ ແລະ ຂົນສົ່ງ ເຊິ່ງໄດ້ມີກົດໝາຍວ່າດ້ວຍການຂົນສົ່ງທາງບົກ (2012), ການຂົນສົ່ງຫຼາຍຮູບແບບ (2012) ແລະ ລະບຽບການວ່າດ້ວຍການອະນຸມັດການສ້າງຕັ້ງທຸລະກິດ ຂອງ ຂະແໜງໂຍທາທິການ ແລະ ຂົນສົ່ງ (2012) ເປັນເຄື່ອງມືທີ່ໃຊ້ໃນການຄຸ້ມຄອງ. ມີຫລາຍໆບົດບັນຍັດ ຂອງບັນດາກົດໝາຍ ແລະ ຂໍ້ກຳນົດຂອງລະບຽບການທີ່ມີຢູ່ ແມ່ນໄດ້ມີການຈັດຕັ້ງປະຕິບັດບາງສ່ວນ ຫຼືບໍ່ໄດ້ຈັດຕັ້ງປະຕິບັດເລີຍ. ການປະເມີນຂອງທະນາຄານໂລກທີ່ຜ່ານມາກ່ຽວກັບຂອບຂ່າຍດ້ານການຈັດອົງການໄດ້ກຳນົດໃຫ້ເຫັນຊ່ອງວ່າງຂອງການຈັດຕັ້ງປະຕິບັດທີ່ກ່ຽວຂ້ອງກັບໃບອະນຸຍາດດຳເນີນກິດຈະການ, ໂດຍຜູ້ຈັດສົ່ງສິນຄ້າແມ່ນໄດ້ຮັບໃບອະນຸຍາດປະກອບທຸລະກິດການຂົນສົ່ງທົ່ວໄປແທນທີ່ຈະເປັນໃບອະນຸຍາດດຳເນີນກິດຈະການສະເພາະ. ກົດໝາຍວ່າດ້ວຍການຂົນສົ່ງຫຼາຍຮູບແບບປີ 2012 ແມ່ນຍັງບໍ່ທັນໄດ້ຮັບການ ຈັດຕັ້ງປະຕິບັດ.

186. **ຂໍ້ກຳນົດທີ່ເຄັ່ງຄັດເກີນໄປສຳລັບໃບອະນຸຍາດດຳເນີນທຸລະກິດ (BOL) ສົ່ງຜົນໃຫ້ມີການດຳເນີນວິທີການທີ່ບໍ່ສອດຄ່ອງກັນ ແລະ ເຮັດໃຫ້ການພັດທະນາການບໍລິການດ້ານໂລຊິດສະຕິກບໍ່ຂະຫຍາຍຕົວ.** BOL ສຳລັບຜູ້ປະກອບການຂົນສົ່ງ (ຂໍ້ຕົກລົງ ເລກທີ 13779/ຍທຂ) ໄດ້ລະບຸວ່າທຸລະກິດຈະຕ້ອງເປັນເຈົ້າຂອງຍານພາຫະນະຢ່າງໜ້ອຍ 20 ຄັນ, ເຊິ່ງເປັນສິ່ງທີ່ບໍ່ແທດຕົວຈິງສຳລັບທຸລະກິດຂະໜາດນ້ອຍ. ມັນເປັນການຈຳກັດຜູ້ໃຫ້ບໍລິການດ້ານໂລຊິດສະຕິກ ເຊິ່ງມີການຈ້າງການຂົນສົ່ງພາຍນອກ ແລະ ພຽງແຕ່ເຮັດໜ້າທີ່ເປັນນາຍໜ້າ. ມັນຍັງມີອິດທິພົນຕໍ່ທຸລະກິດໃຫ້ຊຸກຍູ້ເຈົ້າໜ້າທີ່ເລືອກໃຊ້ວິທີການສະເພາະກິດແລະ ເບິ່ງຂ້າມຄວາມຕ້ອງການນີ້.

187. **ການຄວບຄຸມຄຸ້ມຄອງ ເກີນຂອບເຂດໃນຂະແໜງການຂົນສົ່ງ ເປັນການຈຳກັດຜູ້ປະກອບລາຍໃໝ່ໃນການເຂົ້າສູ່ວົງການ ແລະ ຈຳກັດການແຂ່ງຂັນ.** ຂໍ້ກຳນົດເພື່ອໃຫ້ນັກລົງທຶນດ້ານການຂົນສົ່ງແລະໂລຊິດສະຕິກລາຍໃໝ່ສົ່ງແຜນທຸລະກິດເພື່ອໃຫ້ເຈົ້າໜ້າທີ່ MPWT ມີການກວດກາທົບທວນ ບໍ່ແມ່ນບົດບາດທີ່ເໝາະສົມສຳລັບເຈົ້າໜ້າທີ່ຂອງລັດ. ເຈົ້າໜ້າທີ່ລັດຖະບານບໍ່ຄວນປະເມີນການຕັດສິນໃຈທາງທຸລະກິດ; ອັນນີ້ດີທີ່ສຸດແມ່ນໃຫ້ປ່ອຍໃຫ້ພາກເອກະຊົນ. ພາຍໃຕ້ລະບຽບການໃນປັດຈຸບັນ, ເຈົ້າໜ້າທີ່ລັດຖະບານອາດຈະປະຕິເສດຄຳຮ້ອງ ຖ້າເຫັນວ່າປະຕິບັດບໍ່ໄດ້ຈິງແທ້. ເງື່ອນໄຂມາດຖານການອະນຸມັດຍັງຂາດຄວາມໂປ່ງໃສ ແລະ ບໍ່ສອດຄ່ອງກັບປະເພນີປະຕິບັດທີ່ດີຂອງສາກົນ ທີ່ເນັ້ນໃສ່ຄວາມປອດໄພຂອງຜູ້ຊົມໃຊ້, ສຸຂະພາບ ແລະ ການປົກປັກຮັກສາສິ່ງແວດລ້ອມ. ນອກຈາກນັ້ນ, ການຮຽກຮ້ອງໃຫ້ BOL ຕ້ອງໄດ້ຮັບການອະນຸມັດຈາກຄະນະກຳມະການຂອງອົງການທີ່ກ່ຽວຂ້ອງເຮັດໃຫ້ເກີດກຸ່ມຜົນປະໂຫຍດໃນທ້ອງຖິ່ນ ລວມທັງມີການປຶກສາຫາລືກັບບັນດາທຸລະກິດທີ່ມີຢູ່ກ່ອນແລ້ວ. ມັນບໍ່ແມ່ນການປະຕິບັດທີ່ດີທີ່ຈະໃຫ້ທຸລະກິດທີ່ມີຢູ່ແລ້ວມາມີສ່ວນຮ່ວມພົວພັນນຳ, ເຖິງວ່າຈະເປັນທາງອ້ອມ, ໃນການອະນຸມັດທຸລະກິດລາຍໃໝ່ທີ່ອາດຈະເປັນຄູ່ແຂ່ງໄດ້.

### ຕາຕະລາງ 5.3 ຂໍ້ຈຳກັດ ໃນການເຂົ້າມາສູ່ວົງການ ຂອງຂະແໜງການຂົນສົ່ງ ແລະ ໂລຊິດສະຕິກ

| ລະຫັດISIC | ກິດຈະການ | ທຶນຕ່ຳສຸດ(ໂດລາສະຫະລັດ) | ການເປັນເຈົ້າຂອງຂອງຝ່າຍຕ່າງປະເທດ (ສ່ວນຮ້ອຍ) | ລະບຽບການ |
|---|---|---|---|---|
| 4923 | ການຂົນສົ່ງສິນຄ້າທາງບົກ | | | ເລກທີ 13779/ຍທຂ 21 ສິງຫາ 2012 |
| | ການຂົນສົ່ງສິນຄ້າພາຍໃນ | 350.000 | 100 | |
| | ການຂົນສົ່ງສິນຄ້າລະຫວ່າງປະເທດ | 570.000 | 49 | |
| 5210 | ການໃຫ້ເຊົ່າສາງ ແລະ ການເກັບຮັກສາສິນຄ້າ | 110.000 | | |
| 5221 | ກິດຈະກຳການໃຫ້ບໍລິການທີ່ອາດເກີດກັບການຂົນສົ່ງທາງບົກ | | | |
| | ສະຖານີບໍລິການສິນຄ້າພາຍໃນ | 590.000 | 49 | |
| | ລະຫວ່າງປະເທດ ແລະ ຂ້າມຊາຍແດນ | 1.100.000 | | |
| 5229 | ກິດຈະກຳອື່ນໆທີ່ສະໜັບສະໜູນການຂົນສົ່ງ | | | |
| | ການບໍລິການຂົນສົ່ງສິນຄ້າພາຍໃນ | 350.000 | 49 | |
| | ການບໍລິການຂົນສົ່ງສິນຄ້າລະຫວ່າງປະເທດ | 350.000 | | |

*ແຫລ່ງທີ່ມາ: ບໍລິສັດ EMC, 2016*

188. **ກົດໝາຍ ແລະ ລະບຽບການພາຍໃນປະເທດບໍ່ສອດຄ່ອງກັບແຜນດຳເນີນງານອາຊຽນໃນການເຊື່ອມໂຍງການບໍລິການດ້ານໂລຊິດສະຕິກ.** ແຜນດຳເນີນງານອາຊຽນໄດ້ຮຽກຮ້ອງໃຫ້ປະເທດສະມາຊິກ ຕ້ອງເປີດຂະແໜງບໍລິການດ້ານໂລຊິດສະຕິກຂອງຕົນ ໃຫ້ແກ່ຄົນສັນຊາດ ຂອງບັນດາປະເທດສະມາຊິກອື່ນໆ, ຂຶ້ນເປັນ 70 ສ່ວນຮ້ອຍກ່ອນປີ 2013. ປັດຈຸບັນ, ການເຂົ້າຮ່ວມຂອງຕ່າງປະເທດໃນຂະແໜງໂລຊິດສະຕິກ ແລະ ການຂົນສົ່ງຂອງ ສປປ ລາວ ແມ່ນຖືກຈຳກັດ, ໂດຍມີຄວາມຕ້ອງການທຶນຕ່ຳສຸດ ແລະ ມີກຳນົດເພດານກຳມະສິດສູງສຸດ. ຂໍ້ຈຳກັດເຫຼົ່ານີ້ແມ່ນສະແດງຢູ່ໃນຕາຕະລາງ 5.3.

189. **ສປປ ລາວ ບໍ່ໄດ້ຈັດຕັ້ງປະຕິບັດສັນຍາການຜ່ານແດນລະຫວ່າງປະເທດ.** ສປປ ລາວ ເປັນສະມາ ຊິກຂອງຂອບອາຊຽນ ວ່າດ້ວຍການອຳນວຍຄວາມສະດວກໃນການຂົນສົ່ງສິນຄ້າຜ່ານແດນ (1998) ແລະ ຂອບສັນຍາວ່າດ້ວຍການຂົນສົ່ງຫລາຍຮູບແບບ (2005). ຢ່າງໃດກໍ່ຕາມ, ອະນຸສັນຍາການຈັດຕັ້ງປະຕິບັດກໍຍັງບໍ່ທັນໄດ້ສຳເລັດ. ສປປ ລາວ ຍັງເປັນພາຄີຂອງແຜນດຳເນີນງານອາຊຽນໃນການເຊື່ອມໂຍງຂະແໜງການໂລຊິດສະຕິກອາຊຽນ (2007) ແລະ ສັນຍາການຂົນສົ່ງຂ້າມຊາຍແດນ GMS CBTA (2007). GMS CBTA ຈັດໃຫ້ມີການແລກປ່ຽນສິດທິດ້ານການຈະລາຈອນ ແລະໃບອະນຸຍາດການຂົນສົ່ງຜ່ານແດນທີ່ກຳນົດສຳລັບແຕ່ລະປະເທດ.

190. **ສປປ ລາວ ຈຳເປັນຕ້ອງໄດ້ປະຕິຮູບລະບຽບການຂອງຂະແໜງບໍລິການໂລຊິດສະຕິກຂອງຕົນ ເພື່ອຊຸກຍູ້ສົ່ງເສີມການລົງທຶນໃໝ່, ເພີ່ມທະວີການແຂ່ງຂັນຢ່າງມີປະສິດທິພາບ ແລະ ສະໜອງການບໍລິການທີ່ກວ້າງຂວາງໃຫ້ມີປະສິດທິພາບຫຼາຍຂຶ້ນ.** ອັນນີ້ຮຽກຮ້ອງໃຫ້ມີການປັບປຸງຂໍ້ຕົກລົງ ເລກທີ 13779/ຍທຂ, ລົງວັນທີ 21.08.2012 ໂດຍການຖອນຂໍ້ຈຳກັດດ້ານການເປັນເຈົ້າຂອງໃນຂະແໜງການໂລຊິດສະຕິກ, ຖອນຂໍ້ກຳນົດສຳລັບການນຳສະເໜີແຜນທຸລະກິດ/ການສຶກສາຄວາມເປັນໄປໄດ້, ປັບປຸງຂະບວນການອອກໃບອະນຸຍາດ, ເຜີຍແຜ່ຂໍ້ມູນກ່ຽວກັບການອະນຸມັດຂອງ BOLs ແລະ ພິຈາລະນາໃຫ້ມີການສືບສວນສອບສວນພຶດຕິກຳທີ່ຕ້ານການແຂ່ງຂັນໃນຂະແໜງການໂລຊິດສະຕິກ. ຂັ້ນຕອນການອອກໃບອະນຸຍາດຕ້ອງອີງໃສ່ຂັ້ນຕອນການປະຕິບັດທີ່ເປັນມາດຕະຖານທີ່ໂປ່ງໃສແລະສາມາດຄາດເດົາໄດ້ ເຊິ່ງ ລວມມີມາດຖານທີ່ຈະແຈ້ງໃນການອະນຸມັດ ທີ່ພົວພັນເຖິງຂໍ້ກຳນົດດ້ານຄວາມປອດໄພ ຂອງພົນລະເມືອງ, ສຸຂະພາບ ແລະ ສິ່ງແວດລ້ອມ. ລະບຽບການຍັງຕ້ອງການໃຫ້ຄວາມກະຈ່າງແຈ້ງກ່ຽວກັບສະຖານະພາບທາງດ້ານກົດໝາຍ ແລະຂໍ້ກຳນົດການດຳເນີນງານສຳລັບຜູ້ປະກອບການດ້ານການຂົນສົ່ງຫລາຍຮູບແບບ.

191. **ຮັບປະກັນໃຫ້ສາທາລະນະຊົນ ສາມາດການເຂົ້າເຖິງຈຸດຂຶ້ນເຄື່ອງລົງເຄື່ອງຢູ່ປາຍທາງເສັ້ນທາງລົດໄຟ ແລະ ພື້ນຖານໂຄງລ່າງອື່ນໆ ຂອງທາງລົດໄຟ ແລະ ຮັບປະກັນການຕັ້ງລາຄາທີ່ໂປ່ງໃສ.** ອັນນີ້ລວມມີການສ້າງ ICDs ເປັນສິ່ງອຳນວຍຄວາມສະດວກສຳລັບຜູ້ໃຊ້ທົ່ວໄປແລະເປັນການເພື່ອໄວ້ສຳລັບມີບໍລິສັດຜູ້ປະກອບການຫຼາຍຄົນໃນແຕ່ລະ ICD. ກົດໝາຍວ່າດ້ວຍ ICDs ແລະທ່າບົກຄວນໄດ້ຮັບການປັບປຸງເພື່ອໃຫ້ມີຄວາມຊັດເຈນກ່ຽວກັບສະຖານະພາບພິເສດທາງດ້ານພາສີຂອງສິ່ງເຫລົ່ານີ້. ຕາຕະລາງຄ່າທຳນຽມສຳລັບການບໍລິການໂລຊິດສະຕິກທາງລົດໄຟຄວນຈະມີໄວ້ເພື່ອເຜີຍແຜ່ທົ່ວໄປ.

192. **ຈັດຕັ້ງປະຕິບັດສັນຍາການຜ່ານແດນ ແລະ ຄວບຄຸມຄຸ້ມຄອງການນຳໃຊ້ຕູ້ຄອນເທນເນີ ເພື່ອພັດທະນາການຂົນສົ່ງຫຼາຍຮູບແບບ.** ສປປ ລາວ ຄວນຈັດຕັ້ງປະຕິບັດການນຳໃຊ້ໜັງສືຜ່ານແດນສິນຄ້າ ATA Carnet ຢ່າງເປັນທາງການ ເຊິ່ງໄດ້ຮັບການຍອມຮັບວ່າເປັນເອກະສານພາສີສາກົນໃນການນຳເຂົ້າ-ສົ່ງອອກຊົ່ວຄາວໄດ້ໃນ 87 ປະເທດ; ມັນອະນຸຍາດໃຫ້ມີການແຈ້ງພາສີໂດຍຍົກເວັ້ນ ຫລືງົດການເກັບພາສີແລະອາກອນສິນຄ້າພາຍໃຕ້ເງື່ອນໄຂ ທີ່ວ່າ ຈະຕ້ອງໄດ້ສົ່ງອອກສິນຄ້າຄືນພາຍໃນ 12 ເດືອນ. ສປປ ລາວ ຄວນພິຈາລະນາເຂົ້າຮ່ວມສົນທິສັນຍາວ່າດ້ວຍການຂົນສົ່ງສິນຄ້າລະຫວ່າງປະເທດພາຍໃຕ້ການຄອບຄຸມຂອງ ໜັງສືຂົນສົ່ງສິນຄ້າຜ່ານແດນພາສີລະຫວ່າງປະເທດ TIR Carnets (ສົນທິສັນຍາການຂົນສົ່ງທາງບົກລະຫວ່າງປະເທດ TIR).



# ບົດທີ 6 ກະສິກຳ ແລະ ທຸລະກິດການກະເສດ: ບັນດານະໂຍບາຍດ້ານການຄ້າ ແລະ ດ້ານການຄຸ້ມຄອງດິດສິນ

## 6.1 ບົດສະເໜີ

193. **ການເພີ່ມການຈະເລີນເຕີບໂຕທາງດ້ານກະສິກຳແມ່ນວຽກໃຈກາງ ເພື່ອຫຼຸດຜ່ອນຄວາມທຸກຍາກ, ເພື່ອໃຫ້ເກີດການເຕີບໂຕທາງເສດຖະກິດທີ່ມາຈາກຖານທີ່ຫລາກຫລາຍ ແລະ ເພື່ອຫັນ ສປປ ລາວເປັນປະເທດທີ່ມີລາຍໄດ້ປານກາງສູງ.** ບົດລາຍງານການພັດທະນາໂລກປີ 2008 ຂອງທະນາຄານໂລກໄດ້ພົບເຫັນວ່າໃນເສດຖະກິດທີ່ "ອີງໃສ່ກະສິກຳ", ການຂະຫຍາຍຕົວທີ່ມາຈາກກະສິກຳແມ່ນໄດ້ຜົນດີໃນການຫຼຸດຜ່ອນຄວາມທຸກຍາກເຖິງ 4 ເທົ່າຫຼາຍກວ່າການເຕີບໂຕທີ່ມາຈາກຂະແໜງການອື່ນໆ (WDR, 2007). ດ້ວຍເຫດທີ່ວ່າເຂົ້າກິນເປັນຂະແໜງສຳຄັນ, ການຍົກສູງຜະລິດຕະພາບຂອງເຂົ້າຈຶ່ງເປັນຈຸດສຳຄັນທີ່ສຸດໃນການຊຸກຍູ້ການເຕີບໂຕດ້ານກະສິກຳໂດຍລວມ. ສປປ ລາວ ມີທ່າແຮງທີ່ຈະໝູນໃຊ້ກະສິກຳເປັນໄມ້ງັດເພື່ອຂັບເຄື່ອນການຫຼຸດຜ່ອນຄວາມທຸກຍາກຢ່າງຕໍ່ເນື່ອງ ແລະ ການຂະຫຍາຍຕົວທາງດ້ານເສດຖະກິດ ແລະ ການຄ້າທີ່ເພີ່ມຂຶ້ນ. ການເພີ່ມທະວີການຜະລິດກະສິກຳເປັນສິນຄ້າຈະສົ່ງຜົນກະທົບທີ່ບໍ່ສົມສ່ວນໃນການຫຼຸດຜ່ອນຄວາມທຸກຍາກ[25]. ບັນດາປະເທດທີ່ມີການເຕີບໂຕດ້ານກະສິກຳສູງ ໄດ້ມີປະສົບການໃນການຫຼຸດຜ່ອນອັດຕາຄວາມທຸກຍາກ[26] ຢ່າງຫຼວງຫຼາຍ.

194. **ການຂະຫຍາຍຕົວຂອງກະສິກຳບໍ່ບັນລຸໄດ້ຕາມລະດັບທີ່ຄວນຈະເປັນ, ເຖິງວ່າຈະມີທ່າແຮງໃນການຂະຫຍາຍຕົວທີ່ວ່ອງໄວກວ່ານີ້.** ກະສິກຳໄດ້ລ້າຫລັງຂະແໜງການອື່ນໃນເສດຖະກິດຢ່າງຕໍ່ເນື່ອງ; ພົນລະເມືອງລາວສ່ວນໃຫຍ່ທີ່ຢູ່ຕ່ຳກວ່າເສັ້ນຄວາມທຸກຍາກແມ່ນປະເພດເຮັດກະສິກຳແບບກຸ່ມຕົນເອງພໍ່ໃຜພໍ່ລາວ.[27] ນັບຕັ້ງແຕ່ມີບົດ DTIS ປີ 2012, ມູນຄ່າເພີ່ມທາງດ້ານກະສິກຳໄດ້ເຕີບໂຕຊ້າກວ່າຂະແໜງອຸດສາຫະກຳແລະການບໍລິການ. ເຖິງວ່າຈະມີການຍ້າຍຖິ່ນໄປຢູ່ຕົວເມືອງຢ່າງຫຼວງຫຼາຍ ແລະ ການຂະຫຍາຍຕົວຂອງຂະແໜງການອື່ນໆ, ສປປ ລາວ ຍັງຄົງມີເຂດຊົນນະບົດເປັນສ່ວນໃຫຍ່, ການຂະຫຍາຍຕົວຂອງເສດຖະກິດໄດ້ສົ່ງຜົນກະທົບທີ່ຂ້ອນຂ້າງບໍ່ຫລາຍປານໃດຕໍ່ການລົບລ້າງຄວາມທຸກຍາກໃນເຂດຊົນນະບົດ. ດ້ວຍຜົນຜະລິດເຂົ້າທີ່ຕ່ຳກວ່າເມື່ອທຽບໃສ່ກັບໄທ ແລະ ຫວຽດນາມ ແລະ ຄວາມເອົາຈິງເອົາຈັງຂອງການປູກພືດທີ່ໜ້ອຍກວ່າ, ມູນຄ່າເພີ່ມ ຂອງກະສິກຳຕໍ່ເຮັກຕາຈຶ່ງຍັງຕ່ຳກວ່າຫຼາຍ. ສປປ ລາວ, ມີຄວາມອຸດົມສົມບູນທາງດ້ານຊັບພະຍາກອນທຳມະຊາດ ແລະ ອົງຄວາມຮູ້ທາງດ້ານວັດທະນະທຳອັນເລິກເຊິ່ງ, ອ້ອມຮອບໄປດ້ວຍບັນດາເສດຖະກິດທີ່ຂະຫຍາຍຕົວຢ່າງໄວວາເຊິ່ງມີປະຊາກອນຈຳນວນຫຼວງຫຼາຍ, ມີທ່າແຮງທີ່ບົ່ມຊ້ອນທີ່ຈະໃຊ້ປະໂຫຍດຢ່າງເຕັມທີ່ຈາກສະຖານທີ່ຕັ້ງພູມສາດ ແລະ ການມີແຫຼ່ງຊັບພະຍາກອນທຳມະຊາດ ໂດຍວິທີການເພີ່ມການຄ້າທາງດ້ານຜະລິດຕະພັນສິນຄ້າກະສິກຳ.

195. **ການເພີ່ມຜະລິດຕະພາບ ຂອງກະສິກຳແມ່ນກຸນແຈສຳຄັນສຳລັບການເຕີບໂຕແບບທົ່ວເຖິງ ແລະ ສາມາດປັບຕົວສູ່ສະພາບເດີມໄດ້ເມື່ອຖືກກະທົບ.** ຂະແໜງກະສິກຳເປັນບ່ອນຈັດຫາອາຊີບວຽກງານໃນການດຳລົງຊີວິດ ຂອງປະຊາກອນເກືອບ 2/3 (ປະມານ 4,8 ລ້ານຄົນ) ແລະ ກວມເອົາ 15 ສ່ວນຮ້ອຍຂອງ GDP. ການເພີ່ມຜະລິດຕະພາບ, ລາຍໄດ້ ແລະ ວຽກເຮັດງານທຳໃນຂະແໜງກະສິກຳແມ່ນສິ່ງຈຳເປັນເພື່ອຊຸກຍູ້ການເຕີບໂຕແບບທົ່ວເຖິງ ແລະ ສາມາດຟື້ນຕົວໄດ້ໄວ. ເຖິງວ່າຈະມີຊັບພະຍາກອນທຳມະຊາດທີ່ອຸດົມສົມບູນ, ຊັບພະຍາກອນທີ່ດິນຂ້ອນຂ້າງອຸດົມສົມບູນ ແລະ ການມີພູມສັນຖານທີ່ຢູ່ໃກ້ກັບຈຸດໃຈກາງທີ່ມີປະຊາກອນຂະໜາດໃຫຍ່, ແຕ່ຂະແໜງການກະສິກຳໄດ້ມີຜົນການຂະຫຍາຍຕົວທີ່ຈຳກັດ. ການເພີ່ມຂຶ້ນຂອງການຜະລິດແມ່ນມາຈາກການຂະຫຍາຍເນື້ອທີ່ການປູກຝັງເປັນສ່ວນໃຫຍ່, ແທນທີ່ຈະແມ່ນມາຈາກຜະລິດຕະພາບທີ່ເພີ່ມຂຶ້ນ.

196. **ການເພີ່ມຜະລິດຕະພາບໃນຂະແໜງກະສິກຳເປັນການສະໜັບສະໜູນເປົ້າໝາຍຂອງລັດຖະບານໃນການສືບຕໍ່ຫຼຸດຜ່ອນຄວາມທຸກຍາກ ແລະ ໃນການກ້າວໄປສູ່ສະຖານະພາບປະເທດທີ່ມີລາຍໄດ້ປານກາງ.** ໃນລະຫວ່າງປີ 2010 ຫາ 2019, ການເຕີບໂຕຂອງຜົນຜະລິດກະສິກຳປະຈຳປີສະເລ່ຍແມ່ນ 5,7%. ລາຍໄດ້ຈາກການປູກພືດ, ການລ້ຽງສັດ ແລະ ຜະລິດຕະພັນຈາກປ່າໄມ້ກວມເອົາປະມານ 2 ສ່ວນ 3 ຂອງລາຍໄດ້ຂອງຄົວເຮືອນຊົນນະບົດ (ການສຳຫລວດກະສິກຳຂອງ ສປປ ລາວ, 2011), ເຖິງແມ່ນວ່າຈະມີຄວາມແຕກຕ່າງກັນໃນລະດັບພາກຕ່າງໆຢ່າງຫຼວງຫຼາຍ. ບັນດາແຂວງພາກເໜືອ ມີລາຍໄດ້ຈາກການປູກພືດຫຼາຍກວ່າ, ໃນຂະນະທີ່ແຂວງພາກກາງ ແລະ ພາກໃຕ້ແມ່ນມີແຫຼ່ງລາຍໄດ້ທີ່ຫຼາກຫຼາຍກວ່າ. ລາຍໄດ້ມີຄວາມແຕກຕ່າງກັນຢ່າງຫຼວງຫຼາຍ ໂດຍທີ່ຂົງເຂດທີ່ເອື່ອຍອີງຫລາຍກວ່າໃສ່ກະສິກຳແບບກຸ່ມຕົນເອງພໍ່ໃຜພໍ່ລາວ ແລະ ມີການຕິດພັນໜ້ອຍກັບຕະຫຼາດ ແມ່ນຈະມີອັດຕາຄວາມທຸກຍາກສູງກວ່າ. ນອກຈາກນີ້ຍັງມີການແບ່ງເພດທີ່ສຳຄັນພາຍໃນກຳລັງແຮງງານກະສິກຳທີ່ມີແມ່ຍິງເຮັດວຽກຫຼາຍຊົ່ວໂມງກວ່າ ໂດຍມີການເຂົ້າເຖິງສິນເຊື່ອໜ້ອຍ ແລະນຳໃຊ້ເຕັກໂນໂລຊີໃຫມ່ຫນ້ອຍກວ່າ (FAO, 2018). ການແບ່ງເພດນີ້ໂດຍສະເພາະແມ່ນກໍລະນີທີ່ຢູ່ໃນເຂດຊົນເຜົ່າເນີນສູງ. ເມື່ອແມ່ຍິງສາມາດມີສິດຊົມໃຊ້ ແລະ ຄອບຄອງທີ່ດິນເຂົາເຈົ້າຈະມີທ່າອຽງຫຼາຍກວ່າຜູ້ຊາຍໃນທຳການຜະລິດ

25. ເຊັ່ນດຽວກັນມັນຈະຫຼຸດຜ່ອນການຂາດສານອາຫານ. ອັດຕາການຂາດສານອາຫານແມ່ນສູງຂຶ້ນໃນເຂດພູດອຍ ແລະ ພາກ ເໜືອ ແລະ ມີການພົວພັນກັນຢ່າງໃກ້ຊິດກັບຄ່າຂົນສົ່ງທີ່ສູງ ເຊິ່ງຈຳກັດການເຂົ້າເຖິງຕະຫຼາດຂອງຜະລິດຕະພັນໝາກໄມ້, ຜັກ, ປາ, ແລະ ສັດລ້ຽງທີ່ຜະລິດໃນພື້ນທີ່. ສປປ ລາວ ຢູ່ໃນອັນດັບທີ 87 ໃນຈຳນວນ 117 ປະເທດ ຂອງດັດຊະນີຄວາມອຶດຫິວທົ່ວໂລກ (IFPRI, 2019).

26. ຕົວຊີ້ວັດການພັດທະນາຂອງໂລກ(ຖານຂໍ້ມູນ). https://databank.worldbank.org/source/world-development-indicators

27. 80 ສ່ວນຮ້ອຍຂອງປະຊາກອນຊົນນະບົດຍັງຄົງເປັນຊາວນາທີ່ຜະລິດກຸ່ມຕົນເອງພໍ່ໃຜພໍ່ລາວ.

ເປັນສິນຄ້າເພື່ອເສີມສ້າງລາຍໄດ້ໃຫ້ຄົວເຮືອນ. ການສ້າງກາລະໂອກາດເພີ່ມຂຶ້ນໃຫ້ແກ່ແມ່ຍິງໃນຂະແໜງກະສິກຳອາດຈະຊຸກຍູ້ສົ່ງເສີມການເຕີບໂຕດ້ານກະສິກຳ.

197. **ການປູກເຂົ້າແມ່ນກວມສ່ວນໃຫຍ່ ຂອງການຜະລິດກະສິກຳທັງໝົດ ແຕ່ກໍໄດ້ມີຫຼັກຖານຂອງການຫັນໄປສູ່ການປູກພືດອື່ນໆທີ່ເພີ່ມຂຶ້ນ.** ໃນຂະແໜງກະສິກຳ ສ່ວນໃຫຍ່ຈະແມ່ນການປູກເຂົ້າ ເຊິ່ງກວມເອົາ 70 ສ່ວນຮ້ອຍ ແລະ ຖັດມາແມ່ນການຜະລິດສັດລ້ຽງ (15 ສ່ວນຮ້ອຍ). ສ່ວນແບ່ງຂອງພືດທີ່ປູກເປັນສິນຄ້າຕາມປະເພນີທີ່ເຄີຍເຮັດມາ, ລວມທັງກາເຟ, ໝາກກ້ວຍ, ສາລີ, ມັນຕົ້ນ ແລະ ພືດຜັກ, ໃນຈຳນວນຜົນຜະລິດທັງໝົດແມ່ນໄດ້ຂະຫຍາຍຕົວຢ່າງໄວວາໃນທົດສະວັດທີ່ຜ່ານມາ ແຕ່ກໍຍັງຂ້ອນຂ້າງມີໜ້ອຍ. ຊາວກະສິກອນຍິງກວມເອົາຫຼາຍກວ່າເຄິ່ງໜຶ່ງ ຂອງກິດຈະກຳກະສິກຳທັງໝົດ. ການຜະລິດ, ການຕະຫຼາດ ແລະ ການປຸງແຕ່ງກະສິກຳແມ່ນກຳລັງໄດ້ຮັບການຫັນປ່ຽນໂດຍການຫັນເປັນຕົວເມືອງຢ່າງວ່ອງໄວ, ການເຄື່ອນຍ້າຍອອກໄປຢູ່ບ່ອນອື່ນ ແລະ ຍ້ອນມີລາຍໄດ້ເພີ່ມຂຶ້ນ. ການຂາດແຄນແຮງງານ ແລະ ຄວາມຕ້ອງການອາຫານຫຼັກທີ່ຫຼາກຫຼາຍຂຶ້ນ ເຊິ່ງກຳລັງຂະຫຍາຍຕົວ, ບວກກັບຕະຫຼາດທີ່ເປີດເສລີຫຼາຍຂຶ້ນ, ກຳລັງສ້າງນະໂຍບາຍສົ່ງເສີມໃຫ້ການຜະລິດກະສິກຳກາຍເປັນການຜະລິດເປັນສິນຄ້າໃຫ້ນັບມື້ຫຼາຍຂຶ້ນ. ລະ ດັບການຫັນການຜະລິດກະສິກຳເປັນສິນຄ້າ ແລະ ການຄ້າຂ້າມຊາຍແດນຫລາຍຂຶ້ນ ແມ່ນມີຜົນເຮັດໃຫ້ລາຍໄດ້ເພີ່ມຂຶ້ນ.

198. **ການຂະຫຍາຍຕົວຂອງຊາວນາໜ້ອຍ ໄດ້ເຮັດໃຫ້ລາຍໄດ້ກະສິກຳເພີ່ມຂຶ້ນ.** ຊາວນາໜ້ອຍຍັງຄົງເປັນຈຳນວນສ່ວນໃຫຍ່. ຢ່າງໃດກໍ່ຕາມ, ໃນທົດສະວັດທີ່ຜ່ານມາແມ່ນໄດ້ເຫັນການຂະຫຍາຍຕົວຂອງການປູກຝັງລ້ຽງສັດເປັນຟາມທີ່ມີການຄຸ້ມຄອງແບບມືອາຊີບຫຼາຍຂຶ້ນເພື່ອຜະລິດປ້ອນຕະຫຼາດແລະກໍມີຈຳນວນຊາວນາຊາວສວນລາຍນ້ອຍທີ່ເພີ່ມຂຶ້ນທີ່ມີສາມາດຂາຍສ່ວນໜຶ່ງຂອງຜົນຜະລິດຂອງພວກເຂົາອອກສູ່ຕະຫຼາດ. ການຍົກລະດັບຜະລິດຕະພາບຂອງຊາວນານ້ອຍຮຽກຮ້ອງໃຫ້ມີການນຳເອົາວິທີປະຕິບັດທາງກະສິກຳທີ່ມີການປັບປຸງດີແລ້ວມານຳໃຊ້ ແລະ ການເຂົ້າເຖິງວັດຖຸປະກອນຮັບໃຊ້ກະສິກຳທີ່ມີຄຸນນະພາບທີ່ດີກວ່າເຊັ່ນ: ເມັດພັນພືດ, ຝຸ່ນ ແລະ ເຄື່ອງກົນຈັກ. ວິທີການປະຕິບັດທີ່ດີກວ່າດ້ານການປູກຝັງລ້ຽງສັດ ອາດຈະເກີດຜົນຕົວຈິງໄດ້ ຖ້າຫາກຈັດໃຫ້ມີການເຊັນສັນຍາຜູກພັນສອງສົ້ນກັບວິສາຫະກິດຜູ້ຮັບຊື້ສິນຄ້າທີ່ຜະລິດ, ມີການສຶກສາໃຫ້ຄວາມຮູ້ແກ່ຊາວນາຊາວສວນໂດຍຜ່ານການບໍລິການສົ່ງເສີມກະສິກຳ ແລະ ການປະຕິຮູບນະໂຍບາຍ ແລະ ລະບຽບການທີ່ຫຼຸດຜ່ອນຕົ້ນທຶນທາງການຄ້າ ແລະ ຄ່າໃຊ້ຈ່າຍທາງທຸລະກຳ.

199. **ຍຸດທະສາດກະສິກຳ ຂອງລັດຖະບານໄດ້ຖືການເພີ່ມຜະລິດຕະພາບກະສິກຳເປັນບຸລິມະສິດ.** ການເພີ່ມຜະລິດຕະພາບກະສິກຳໃນຂະແໜງການປູກເຂົ້າແມ່ນໜຶ່ງໃນບັນດາຂະແໜງການບູລິມະສິດໃນແຜນຫ້າປີ NSEDP ຄັ້ງທີ 8 (2016-2020). ຍຸດທະສາດພັດທະນາກະສິກຳຮອດປີ 2025 ແລະ ວິໄສທັດຮອດປີ 2030 (ADS 2025) ມີການຊຸກຍູ້ສົ່ງເສີມການຄ້ຳປະກັນສະບຽງອາຫານແຫ່ງຊາດ ແລະ ພິຈາລະນາຈະໃຫ້ມີຂະແໜງກະສິກຳທີ່ທັນສະໄໝ ແລະ ນັບມື້ນັບມີປະສິດທິຜົນ ແນໃສ່ປະກອບສ່ວນໃຫ້ແກ່ການເຕີບໂຕທາງດ້ານເສດຖະກິດ. ADS 2025 ເຫັນວ່າຂະແໜງກະສິກຳໄດ້ສ້າງວຽກເຮັດງານທຳເພີ່ມເຕີມ ແລະ ລາຍໄດ້ທີ່ສູງຂຶ້ນເພື່ອຫຼຸດຜ່ອນຄວາມທຸກຍາກ ແລະ ເຮັດໃຫ້ຄວາມບໍ່ສະເໝີພາບລະຫວ່າງຕົວເມືອງ-ຊົນນະບົດນ້ອຍລົງ.

200. **ສິ່ງທ້າທາຍຫຼັກລວມມີຊ່ອງວ່າງດ້ານຂໍ້ມູນຂ່າວສານ, ສິ່ງທ້າທາຍໃນການປະສານງານໃນແຕ່ລະຂອດຂອງຕ່ອງໂສ້ມູນຄ່າ, ຂໍ້ຈຳກັດຂອງຕະຫຼາດ ແລະ ລະບຽບການການຄ້າທີ່ປ່ຽນແປງ.** ສິ່ງເຫຼົ່ານີ້ທັງ ໝົດໄດ້ປະກອບສ່ວນເຮັດໃຫ້ຕົ້ນທຶນສູງຂຶ້ນ ແລະ ລາຄາຂາຍຍ່ອຍເຂົ້າສຳລັບຜູ້ຊົມໃຊ້ສູງຂຶ້ນເມື່ອທຽບໃສ່ກັບປະເທດເພື່ອນບ້ານ. ການຈັດການບັນຫາສິ່ງທ້າທາຍເຫຼົ່ານີ້ ຮຽກຮ້ອງໃຫ້ລັດຖະບານມີວິທີແກ້ໄຂ ເພື່ອແນໃສ່ຫຼຸດຜ່ອນສິ່ງກີດຂວາງດ້ານລະບຽບການ ແລະ ດ້ານບໍລິຫານໃນການຊອກແຫຼ່ງຊື້ວັດຖຸປະກອນຮັບໃຊ້ການຜະລິດກະສິກຳດ້ວຍລາຄາທີ່ແຂ່ງຂັນໄດ້, ການປັບປຸງການເຂົ້າເຖິງຂໍ້ມູນຂ່າວສານກ່ຽວກັບວິທີການປະຕິບັດທີ່ດີທາງດ້ານກະສິກຳ, ການຮັບປະກັນການປະຕິບັດຕາມຂໍ້ກຳນົດສຸຂະນາໄມ ແລະ ສຸຂະອະນາໄມພືດ, ການເພີ່ມຄວາມຮູ້ກ່ຽວກັບລາຄາຕະຫຼາດ ແລະ ການເພີ່ມທະວີການເຂົ້າເຖິງທາງດ້ານແຫຼ່ງເງິນທຶນ ສຳລັບຜູ້ດຳເນີນການໃນແຕ່ລະຂອດ ຂອງລະບົບຕ່ອງໂສ້ມູນຄ່າ. ອັນນີ້ຮຽກຮ້ອງໃຫ້ມີການສ້າງຄວາມເຂັ້ມແຂງການໃຫ້ບໍລິການສາທາລະນະ ແລະ ການປະຕິບັດໃຫ້ສອດຄ່ອງຕາມລະບຽບການ ແລະ ຮັບປະ ກັນສະພາບແວດລ້ອມທີ່ເອື້ອອຳນວຍໃຫ້ແກ່ທຸລະກິດສຳລັບການລົງທຶນເອກະຊົນ.

201. **ບົດລາຍງານໄດ້ກຳນົດນະໂຍບາຍການຄ້າທີ່ເປັນບູລິມະສິດ ແລະ ຂໍ້ຈຳກັດດ້ານລະບຽບການທີ່ສອດທ້ອຍກັບຂະແໜງການຕ່າງໆ.** ສິ່ງເຫຼົ່ານີ້ໄດ້ປະກອບສ່ວນເຂົ້າໃນການເພີ່ມຕົ້ນທຶນຄ່າໃຊ້ຈ່າຍດ້ານການຄ້າເຊິ່ງຈຳກັດຂະໜາດຂອງຕະຫຼາດ ແລະ ຫຼຸດຜ່ອນສິ່ງຊຸກຍູ້ໃນການລົງທຶນໃນເຕັກໂນໂລຊີໃໝ່ ແລະ ການເພີ່ມຜະລິດຕະພາບ.

## 6.2 ການມີໂອກາດໃນການໃຊ້ວັດຖຸປະກອນຮັບໃຊ້ກະສິກຳ

202. **ລະບຽບການ ແລະ ນະໂຍບາຍການຄ້າທີ່ມີຢູ່ປັດຈຸບັນແມ່ນຈຳກັດສິດທິຫລືໂອກາດໃນການໃຊ້ບັນດາວັດຖຸປະກອນຮັບໃຊ້ກະສິກຳທີ່ມີລາຄາທີ່ສາມາດແຂ່ງຂັນໄດ.** ການຂະຫຍາຍຕົວທາງດ້ານກະສິກຳແບບທົ່ວເຖິງ ແລະ ຍືນຍົງ ຮຽກຮ້ອງໃຫ້ມີການກະຕຸກຊຸກຍູ້ຊາວກະສິກອນຂະໜາດນ້ອຍ ໃຫ້ຫັນມານຳໃຊ້ວິທີປະຕິບັດທີ່ປັບປຸງແລ້ວທາງດ້ານການປູກການລ້ຽງ ເພື່ອຍົກສູງຜະລິດຕະພາບ ແລະ ເພື່ອຜະລິດຂາຍເຂົ້າສູ່ເສດຖະກິດຕະຫຼາດໃຫ້ຫຼາຍຂຶ້ນ. ສິ່ງດັ່ງກ່າວຮຽກຮ້ອງໃຫ້ຊາວນາຊາວສວນລາຍນ້ອຍ ນຳເອົາເຕັກ ນິກປັບປຸງ, ແນວພັນ ແລະ ວັດຖຸປະກອນຮັບໃຊ້ອື່ນໆທີ່ເປັນການເພີ່ມຜະລິດຕະພາບ ມາໃຊ້ ເຊັ່ນ: ປຸ໋ຍ ແລະ ກົນຈັກບາງຢ່າງ. ສິ່ງດັ່ງກ່າວອາດຈະປະຕິບັດໃຫ້ເປັນຈິງໄດ້ໂດຍຜ່ານຫຼາຍຊ່ອງທາງລວມທັງການຈັດໃຫ້ມີການກະສິກຳແບບສັນຍາຜູກພັນສອງສົ້ນ, ການສຶກສາໃຫ້ຄວາມຮູ້ແກ່ຊາວກະສິກອນໂດຍຜ່ານ

ການໃຫ້ບໍລິການສິ່ງເສີມ (ເຊິ່ງຕົວມັນເອງກໍຕ້ອງການການຂະຫຍາຍສະມັດຖະພາບ ແລະ ການປັບປຸງຄຸນນະພາບ) ແລະ ການປະຕິຮູບນະໂຍບາຍ ແລະ ລະບຽບການບາງຢ່າງທີ່ຈະເພີ່ມການມີໂອກາດໄດ້ໃຊ້ວັດຖຸປະກອບຮັບໃຊ້ກະສິກຳທີ່ມີລາຄາຕໍ່າກວ່າ. ພາກນີ້ຍົກໃຫ້ເຫັນເຖິງການປະຕິຮູບດ້ານລະບຽບການ ແລະ ການບໍລິຫານ ທີ່ຈຳກັດຊາວກະສິກອນ ບໍ່ໃຫ້ເຂົ້າເຖິງວັດຖຸປະກອບຮັບໃຊ້ກະສິກຳທີ່ຫຼາກຫຼາຍ ໃນລາຄາທີ່ແຂ່ງຂັນ. ມັນສຸມໃສ່ເພື່ອເບິ່ງວ່າລະບຽບການ ຂອງລັດຖະບານ, ຄ່າຂົນສົ່ງ, ນະໂຍບາຍການຄ້າ ແລະໂຄງປະກອບ ຂອງຂະແໜງກະສິກຳຈະສົ່ງຜົນກະທົບແນວໃດຕໍ່ໂອກາດການນຳໃຊ້ເມັດພັນ ແລະຝຸ່ນ. ຄວາມສາມາດນຳເຂົ້າວັດຖຸປະກອບຮັບໃຊ້ກະສິກຳດ້ວຍລາຄາທີ່ແຂ່ງຂັນໄດ້ ເປັນຕົວປະກັນທີ່ສຳຄັນບົນເສັ້ນທາງການເພີ່ມທະວີຜະລິດຕະພາບຂອງການຜະລິດກະສິກຳ ແລະ ຄວາມສາມາດແຂ່ງຂັນໃນລະດັບກິດຈະການປູກຝັງລ້ຽງສັດ.

### 6.2.1 ອັດຕາພາສີ ແລະ ມາດຕະການທີ່ບໍ່ແມ່ນພາສີຕໍ່ວັດຖຸປະກອບຮັບໃຊ້ກະສິກຳ

203. **ວັດຖຸປະກອບຮັບໃຊ້ກະສິກຳມີອັດຕາພາສີຕ່ຳ ແຕ່ພັດຜະເຊີນກັບ NTM ທີ່ມີຄ່າສູງ.** ວັດຖຸປະກອບຮັບໃຊ້ກະສິກຳ (ເຄື່ອງຈັກ, ເຄື່ອງມື, ອຸປະກອນ, ວັດສະດຸ) ມີອັດຕາພາສີນຳເຂົ້າຂ້ອນຂ້າງຕ່ຳ, ຕັ້ງແຕ່ສູນເຖິງຫ້າສ່ວນຮ້ອຍ, ຂຶ້ນກັບແຫລ່ງກຳເນີດຂອງມັນ. ເຖິງຢ່າງໃດກໍ່ຕາມ, ໃນຂະນະທີ່ອັດຕາພາສີໄດ້ມີການຫຼຸດລົງຢ່າງຫຼວງຫຼາຍສຳລັບສິນຄ້າທີ່ມີການຊື້ຂາຍສ່ວນໃຫຍ່, ອາກອນຜູ້ຊົມໃຊ້, ຄ່າໃຊ້ຈ່າຍທີ່ກ່ຽວຂ້ອງກັບການຂົນສົ່ງ ແລະການປະຕິບັດໃຫ້ສອດຄ່ອງຕາມລະບຽບການ, ໄດ້ເຮັດໃຫ້ລາຄາສຳລັບສິນຄ້ານຳເຂົ້າທັງໝົດເພີ່ມຂຶ້ນ, ລວມທັງວັດຖຸປະກອບຮັບໃຊ້ການປູກຝັງລ້ຽງສັດ. ນອກຈາກນັ້ນ, ວັດຖຸປະກອບຮັບໃຊ້ກະສິກຳແມ່ນຢູ່ພາຍໃຕ້ບັງຄັບຂອງມາດຕະການທີ່ບໍ່ແມ່ນພາສີເຊິ່ງເປັນຜົນເຮັດໃຫ້ລາຄາສູງຂຶ້ນຢ່າງຫຼວງຫຼາຍ.

204. **NTMs ເປັນອຸປະສັກທີ່ເຊື່ອງຊ້ອນທີ່ສົ່ງຜົນເຮັດໃຫ້ຕົ້ນທຶນທາງການຄ້າສູງ.** NTMs ຍັງຄົງເປັນບັນຫາໃຫຍ່ຂອງຜູ້ຜະລິດໃນ ສປປ ລາວ ເພື່ອປັບປຸງປະສິດທິພາບ ແລະ ເພື່ອໃຫ້ສາມາດແຂ່ງຂັນໄດ້ດີ ກວ່າເກົ່າ. ພວກມັນເປັນສິ່ງກີດຂວາງທີ່ເຊື່ອງຊ້ອນເພາະວ່າ NTMs, ເຊັ່ນ SPS ແລະມາດຕະການບໍລິຫານອື່ນໆລວມທັງສິ່ງກີດກັນທາງດ້ານເຕັກນິກວິຊາການຕໍ່ການຄ້າ (TBT) ແມ່ນຖືວ່າມີຄວາມຈຳເປັນທີ່ຖືກຕ້ອງຕາມກົດໝາຍ ເພື່ອຮັບປະກັນຄວາມປອດໄພ ຂອງຜູ້ຊົມໃຊ້, ການປົກປັກຮັກສາສິ່ງແວດລ້ອມ, ສຸຂະພາບພືດ ແລະ ສະຫວັດດີການສັດ. ການຮັບປະກັນສຸຂະພາບ ແລະ ຄວາມປອດໄພ ຂອງປວງຊົນຮຽກຮ້ອງໃຫ້ມີມາດຕະຖານ ແລະ ລະບຽບການ. ສິ່ງເຫຼົ່ານີ້ຄວນຈະຖືກນຳໃຊ້ກັບຜະລິດຕະພັນສິນຄ້າທັງໝົດ, ບໍ່ວ່າຈະເປັນການຜະລິດພາຍໃນຫຼືນຳເຂົ້າ. ໃນເມື່ອລະບຽບການບໍ່ຈຳແນກລະຫວ່າງຜູ້ຜະລິດ, ຜົນກະທົບ ຂອງລະບຽບການແມ່ນມີຜົນກະທົບທີ່ແຕກຕ່າງກັນ, ເປັນຜົນເຮັດໃຫ້ມີຕົ້ນທຶນສູງກວ່າ ສຳລັບຜະລິດຕະພັນສິນຄ້ານຳເຂົ້າ.

205. **ຂັ້ນຕອນການບໍລິຫານ ເພື່ອຄຸ້ມຄອງລະບຽບການ ສົ່ງຜົນໃຫ້ເກີດການເພີ່ມຕົ້ນທຶນທາງການຄ້າ ເພີ່ມຂຶ້ນສຳລັບການນຳເຂົ້າ.** ເຖິງແມ່ນວ່າຂອບ ຂອງ NTMs ໄດ້ຖືກປັບສູ່ລະດັບ ຂອງບັນດາປະເທດທີ່ຄ້າຍຄືກັນໃນພາກພື້ນ, ບາງຂັ້ນຕອນການບໍລິຫານ ແລະ ຂໍ້ກຳນົດ ເຊັ່ນ: ປະເພນີປະຕິບັດ ຂອງການອອກໃບອະນຸຍາດນຳເຂົ້າສຳລັບສິນຄ້າທີ່ຄ້າຂາຍຈຳນວນຫຼາຍຍັງຄົງມີບັນຫາ ຍ້ອນວ່າສິ່ງເຫຼົ່ານີ້ກາຍເປັນຄ່າທີ່ໃຊ້ຈ່າຍເປັນເງິນ ແລະຕົກທອດໄປຍັງຜູ້ຊື້ສຸດທ້າຍ ເຊິ່ງອາດຈະແມ່ນ ຜູ້ທີ່ເປັນຄອບຄົວທຸກຍາກ ແລະຊາວກະສິກອນຂະໜາດນ້ອຍ (ທະນາຄານໂລກ, 2016). ສິ່ງນີ້ຈະໄດ້ສົນທະນາຫາລືຕື່ມອີກ ພາຍໃຕ້ຂໍ້ "ລະບຽບການຂອງລັດຖະບານ". ຂັ້ນຕອນ ແລະ ວິທີປະຕິບັດທາງພາສີຢູ່ຈຸດຜ່ານແດນ ແລະ ມາດຕະ ການອື່ນໆທີ່ບໍ່ແມ່ນພາສີ ເຊິ່ງອາດບໍ່ຈຳເປັນ ຫຼື ຊ້ຳຊາກ ແລະ ເອກະສານແບບເຈ້ຍສໍາຈໍານວນຫຼາຍທີ່ຕ້ອງການນັ້ນເຊິ່ງສາມາດປະກອບຍື່ນທາງດີຈີຕອນໄດ້, ແມ່ນຍັງສືບຕໍ່ເຮັດໃຫ້ການນຳເຂົ້າ ແລະ ສົ່ງອອກມີຕົ້ນທຶນຍິ່ງສູງຂຶ້ນສຳລັບນັກທຸລະກິດ ແລະ ຜູ້ຊົມໃຊ້ຂອງລາວ ບໍ່ວ່າຈະທາງກົງຕໍ່ກັບສິນຄ້າທີ່ນຳເຂົ້າຫຼື / ແລະທາງອ້ອມຕໍ່ກັບການບໍລິການຂົນສົ່ງ (ຈະໄດ້ສົນທະນາຫາລືຕື່ມອີກພາຍໃຕ້ຂໍ້ "ຄ່າໃຊ້ຈ່າຍໃນການຂົນສົ່ງ"). ນອກເໜືອໄປຈາກຈຸດຜ່ານແດນ, ສິ່ງກີດຂວາງທີ່ເຊື່ອງຊ້ອນເຫຼົ່ານີ້ແມ່ນລວມເຖິງການຄວບຄຸມການນຳເຂົ້າໂດຍຜ່ານການອອກໃບອະນຸຍາດເຊິ່ງເປັນການຈຳກັດການສະໜອງ ແລະ ການແຂ່ງຂັນ, ຈະໄດ້ສົນທະນາຫາລືຕື່ມອີກພາຍໃຕ້ຂໍ້ "ລະບຽບການຂອງລັດ".

206. **ອັດຕາພາສີນຳເຂົ້າວັດຖຸປະກອບຮັບໃຊ້ກະສິກຳ ໂດຍທົ່ວໄປແມ່ນຕ່ຳທຽບກັບສິນຄ້າອື່ນໆ ແຕ່ແຕກຕ່າງກັນໄປຕາມແຫຼ່ງກຳເນີດ, ເຊິ່ງເປັນການຈຳກັດທາງເລືອກ ແລະ ໂອກາດຈະໄດ້ຊື້ໃນລາຄາທີ່ບໍ່ແພງ.** ສປປ ລາວ ເປັນສະມາຊິກອາຊຽນ. ວັດຖຸປະກອບຮັບໃຊ້ກະສິກຳຈາກບັນດາປະເທດສະມາຊິກອາຊຽນ ແລະ ຈາກບັນດາປະເທດທີ່ມີສັນຍາການຄ້າເສລີພິເສດກັບ ສປປ ລາວ ຫຼື ກັບອາຊຽນ, ແມ່ນມີອັດຕາພາສີສູນ ຫຼື ສູງກວ່າແຕ່ຕ່ຳກວ່າອັດຕາພາສີ MFN 5-10 ສ່ວນຮ້ອຍ, ດັ່ງທີ່ສະແດງຢູ່ໃນຕາຕະລາງ 6.1.

207. **ອັດຕາພາສີຕ່ຳສົ່ງຜົນກະທົບຕໍ່ການແຂ່ງຂັນ.** ແມ້ແຕ່ອັດຕາພາສີທີ່ຂ້ອນຂ້າງຕ່ຳ (5-10 ສ່ວນຮ້ອຍ) ກໍຍັງອາດຈະມີຜົນກະທົບຢ່າງຫຼວງຫຼາຍຕໍ່ການແຂ່ງຂັນ ນັບທັງໂຕທີ່ເປັນພື້ນຖານສຸດ ກໍຄືກະສິກຳຂະໜາດນ້ອຍຫຼືແມ່ກະທັ້ງຂະໜາດໃຫຍ່ຂອງສປປລາວ, ເມື່ອຄຳນຶງເຖິງຄ່າໃຊ້ຈ່າຍໃນການຂົນສົ່ງທີ່ຂ້ອນຂ້າງສູງ ທີ່ຜູ້ນຳເຂົ້າຂອງ ສປປ ລາວ ກຳລັງຜະເຊີນຢູ່. ນີ້ແມ່ນຄວາມຈິງໂດຍສະເພາະສຳລັບວັດຖຸປະກອບບາງຢ່າງ ເຊັ່ນ: ເຄື່ອງຈັກທີ່ມີລາຍລະອຽດດ້ານເຕັກນິກ ແລະ ຄຸນນະພາບທີ່ແນ່ນອນທີ່ຕ້ອງໄດ້ນຳເຂົ້າ ແລະບໍ່ມີເງື່ອນໄຂໄດ້ຮັບການຍົກເວັ້ນພາສີ. ຕົວຢ່າງ, ລົດໄຖນາທີ່ນຳເຂົ້າມາ ສປປ ລາວ ແມ່ນໄດ້ຮັບການຍົກເວັ້ນພາສີນຳເຂົ້າ (ພາສີສູນ), ຖ້າມາຈາກປະເທດສະມາຊິກອາຊຽນອື່ນ (ພາຍໃຕ້ສັນຍາການຄ້າສິນຄ້າອາຊຽນ), ຫວຽດນາມ (ພາຍໃຕ້ສັນຍາການຄ້າ ລາວ-ຫວຽດນາມ), ສ.ເກົາຫຼີ (ພາຍໃຕ້ເຂດການຄ້າເສລີ

28. "ລົດແທຣັກເຕີ້ສຳລັບວຽກກະສິກຳ" ເຊິ່ງໃຊ້ລະຫັດສິນຄ້າຕາມລະບົບເອກະລາບ HS Codes 8701911000, 8701919000, 8701921000-51000.

ອາຊຽນ-ສເກົາຫຼີ) ແລະຈີນ (ພາຍໃຕ້ສັນຍາການຄ້າເສລີອາຊຽນ-ຈີນ).[28] ແນວໃດກໍ່ຕາມ, ຝຸ່ນເຄມີ, ແກ່ນພືດຜັກ ແລະ ໝາກໄມ້ເພື່ອຫວ່ານ, ເຄື່ອງຈັກໃນການໄຖດິນ, ຫຼືລົດໄຖນາທີ່ນຳເຂົ້າຈາກອົດສະຕຣາລີ ຫຼື ນິວຊີແລນ ແມ່ນຈະຖືກເກັບພາສີ 2 ສ່ວນຮ້ອຍ. ລົດໄຖນາມາຈາກອິນເດຍແມ່ນຖືກເກັບ 3 ສ່ວນຮ້ອຍ, 5-8 ສ່ວນຮ້ອຍຖ້າມາຈາກຍີ່ປຸ່ນ ແລະ 4-10 ສ່ວນຮ້ອຍຖ້າມາຈາກຣັຽກົງ, ຈີນ. ຖ້ານຳເຂົ້າຈາກບ່ອນອື່ນ, ແມ່ນຈະໄດ້ເສຍໃນອັດຕາ MFN ຄື 5-10 ສ່ວນຮ້ອຍ.

208. **ຜະລິດຕະພັນຫຼາຍຊະນິດ ທີ່ມີຈຸດປະສົງສອງດ້ານແມ່ນຜະເຊີນກັບອັດຕາພາສີທີ່ສູງຂຶ້ນ.** ໃນຂະນະທີ່ອັດຕາພາສີນຳເຂົ້າໄດ້ມີການຫຼຸດລົງສຳລັບສິນຄ້າສ່ວນໃຫຍ່, ອັດຕາເຫລົ່ານີ້ພັດໄດ້ຖືກທົດແທນດ້ວຍອາ ກອນຊົມໃຊ້ທີ່ສູງເຊິ່ງເຮັດໃຫ້ເພີ່ມລາຄາສິນຄ້າທີ່ມີສອງຈຸດປະສົງເຊິ່ງມີຄວາມສຳຄັນເພື່ອເຮັດໃຫ້ການຜະ ລິດ ແລະການບໍລິການມີຄວາມທັນສະໄຫມ. ລາຍການທີ່ເບິ່ງຄືວ່າມີຄວາມສຳຄັນໜ້ອຍ ຫຼື ບໍ່ກ່ຽວຂ້ອງກັບວັດຖຸປະກອບຮັບໃຊ້ການຜະລິດ ແຕ່ມີຄວາມສຳຄັນຕໍ່ການດຳເນີນທຸລະກິດ ແລະ ປັບປຸງກິດຈະການທຸລະກິດໃຫ້ທັນສະໄໝ, ເພາະວ່າພວກມັນມີຈຸດປະສົງສອງຢ່າງຄື ເພື່ອນຳໃຊ້ເຂົ້າໃນຂະບວນການຜະລິດ ຫຼື ການບໍລິການ ແລະ ການນຳໃຊ້ສ່ວນຕົວ. ສິ່ງເຫຼົ່ານີ້ລວມມີພາຫະນະ, ຄອມພິວເຕີ ແລະອຸປະກອນສື່ສານ. ອັດຕາພາສີນຳເຂົ້າສຳລັບລາຍການເຫຼົ່ານີ້ໄດ້ຫຼຸດລົງເປັນ 0-20 ສ່ວນຮ້ອຍສຳລັບລົດບັນທຸກ, 0-40 ສ່ວນຮ້ອຍສຳລັບລົດໃຫຍ່, 0-5 ສ່ວນຮ້ອຍສຳລັບຄອມພິວເຕີ, 0-10 ສ່ວນຮ້ອຍສຳລັບໂທລະສັບມືຖືແລະຫ້ອງໜ່ວຍການສື່ສານແບບມືຖືທີ່ຄ້າຍຄືກັນ, ຂຶ້ນກັບແຫລ່ງກຳເນີດຂອງມັນ. ເຖິງວ່າອັດຕາພາສີອາດຈະຂ້ອນຂ້າງຕ່ຳ, ແຕ່ສິນຄ້າເຫຼົ່ານີ້ຕ້ອງເສຍອາກອນມູນຄ່າເພີ່ມ (VAT) ແລະ ຍານພາຫະນະແມ່ນຕ້ອງເສຍອາກອນຊົມໃຊ້. ໝາກຜົນຄື: ອັດຕາພາສີນຳເຂົ້າທີ່ຕ່ຳລົງໄດ້ຜ່ອນຜັນພາລະຂອງບັນດາຜູ້ນຳເຂົ້າສິນຄ້າໃນການເຄື່ອນຍ້າຍສິນຄ້າຂ້າມຊາຍແດນສາກົນ, ເຊິ່ງເປັນການປະຕິບັດຕາມຈຸດປະສົງ ຂອງ "ສັນຍາເຂດການຄ້າເສລີ", ແຕ່ອາກອນຊົມໃຊ້ໄດ້ຮັກສາລາຄາສິນຄ້າເຫລົ່ານີ້ໃຫ້ຢູ່ໃນລະດັບສູງ ແລະ ໃນບາງກໍລະນີ (ເຊັ່ນ: ຍານພາຫະນະ) ແມ່ນສູງກວ່າກ່ອນທີ່ອັດຕາພາສີຈະມີການຫຼຸດລົງ. ຕົວຢ່າງ, ໃນ ສປປ ລາວ, ລົດກະບະທີ່ສາມາດໃຊ້ສຳລັບການຂົນສົ່ງເຄື່ອງມື, ອຸປະກອນ, ເຄື່ອງຈັກຂະໜາດນ້ອຍ ແລະຜະລິດຕະພັນກະສິກຳແຕ່ບ່ອນປູກບ່ອນລ້ຽງໄປຫາຕະຫຼາດ, ເຊັ່ນດຽວກັນກັບຄວາມຕ້ອງການການຂົນສົ່ງສ່ວນບຸກຄົນ, ໂດຍທົ່ວໄປແລ້ວລາຄາແມ່ນເກືອບສອງເທົ່າ ຂອງຍີ່ຫໍ້ ແລະລຸ້ນດຽວກັນທຽບໃສ່ຢູ່ສະຫະລັດ. ຕົ້ນທຶນທີ່ສູງຂຶ້ນເຫຼົ່ານີ້ແມ່ນສິ່ງທ້າທາຍໂດຍສະເພາະສຳລັບຊາວກະສິກອນຂະໜາດນ້ອຍ ແລະ ຈຸນລະວິສາຫະກິດ ແລະ ວິສາຫະກິດປຸງແຕ່ງກະສິກຳຂະໜາດນ້ອຍ.

## ຕາຕະລາງ 6.1 ອັດຕາພາສີນຳເຂົ້າ ຂອງ ສປປ ລາວ ໃນປີ 2020 ສຳລັບວັດຖຸປະກອບຮັບໃຊ້ກະສິກຳທີ່ເລືອກມາ

| ແຫລ່ງກຳເນີດ | ສັນຍາການຄ້າ | ຝຸ່ນ, ແຮ່ທາດ ຫລື ເຄມີ | ເມັດພັນ: ໝາກໄມ້ ແລະ ພືດຜັກ ເພື່ອຫວ່ານ | ໝາກສີບໄຖ, ເຄື່ອງຫວ່ານ/ ຢອດເມັດ, ເຄື່ອງປູກພືດທົ່ວ, ເຄື່ອງດຳນາ | ລົດໄຖນາ |
|---|---|---|---|---|---|
| ແຫລ່ງກຳເນີດອື່ນທີ່ມີ | ອັດຕາພາສີທຳມະດາ | 5 | 5 | 5 | 10 |
| ແຫລ່ງກຳເນີດອື່ນທີ່ມີ | ອັດຕາ MFN (WTO) | 5 | 5 | 5 | 10 |
| ຍີ່ປຸ່ນ | ສັນຍາການຮ່ວມມືເສດຖະກິດແບບຮອບດ້ານອາຊຽນ-ຍີ່ປຸ່ນ | 5 | 5 | 5 | 8 |
| ຫວຽດນາມ | ສັນຍາການຄ້າລາວບຫວຽດນາມ | 0 | 0 | 0 | 0 |
| APTA | ເຂດການຄ້າອາຊີ-ປາຊີຟິກ | 5 | 5 | 5 | 10 |
| ອິນເດຍ | ເຂດການຄ້າເສລີອາຊຽນ-ອິນເດຍ | 0 | 0 | 0 | 3 |
| ເກົາຫລີ | ເຂດການຄ້າເສລີອາຊຽນ-ເກົາຫລີ | 0 | 0 | 0 | 0 |
| ອາຊຽນ | ສັນຍາການຄ້າສິນຄ້າຂອງອາຊຽນ | 0 | 0 | 0 | 0 |
| ອົດສະຕຣາລີ & ນິວຊີແລັນ | ສັນຍາການຄ້າເສລີອາຊຽນ-ອົດສະຕຣາລີ/ນິວຊີແລັນ | 2 | 2 | 2 | 2 |

| | | | | | |
|---|---|---|---|---|---|
| ຈີນ | ສັນຍາການຄ້າເສລີອາຊຽນ-ຈີນ | 0 | 0 | 0 | 0 |
| ຮົງກົງ | ສັນຍາການຄ້າເສລີອາຊຽນ-ຮົງກົງ, ຈີນ | 4 | 4 | 4 | 10 |

*ແຫລ່ງທີ່ມາ: ຮຽບຮຽງຈາກ http://www.laotrade.portal.go.la (ເຂົ້າເບິ່ງຄັ້ງວັນທີ 15 ທັນວາ 2020)*

### 6.2.2 ລະບຽບການຂອງລັດຖະບານ

209. ຝຸ່ນເຄມີ ແລະ ແກ່ນພືດຜັກທັງໝົດທີ່ ຊາວກະສິກອນ **ລາວ ນຳໃຊ້ແມ່ນນຳເຂົ້າຈາກປະເທດເພື່ອນບ້ານ ເພາະບໍ່ມີການຜະລິດພາຍໃນ.** ໃນຂະນະທີ່ມີໂຮງງານຜະລິດຝຸ່ນຊີວະພາບແບບການຄ້າຫຼາຍແຫ່ງ, ສ່ວນໜຶ່ງຂອງຝຸ່ນຊີວະພາບທີ່ສຳຄັນແມ່ນໄດ້ຖືກນຳເຂົ້າຍ້ອນການສະໜອງພາຍໃນບໍ່ພຽງພໍ ແລະ ຄວາມແຕກຕ່າງທາງດ້ານຄຸນນະພາບ ຫຼື ຄຸນລັກສະນະຕ່າງໆ.

210. **ຂໍ້ຈຳກັດສະເພາະຂອງຊາວກະສິກອນລາວ.** ສະພາບແວດລ້ອມທາງທຸລະກິດທີ່ທ້າທາຍອາດເປັນເຫດຜົນບາງສ່ວນທີ່ບໍ່ມີການລົງທຶນໃນການຜະລິດວັດຖຸປະກອບຮັບໃຊ້ກະສິກຳຢູ່ໃນ ສປປ ລາວ. ຍັງມີຂໍ້ຈຳກັດສະເພາະບາງອັນທີ່ເຮັດໃຫ້ການລົງທຶນຫລ້າຊ້າ, ລວມທັງຕົ້ນທຶນພາຍໃນທີ່ຂ້ອນຂ້າງສູງສຳລັບວັດຖຸປະກອບຮັບໃຊ້ກະສິກຳ ແລະຄ່າໃຊ້ຈ່າຍໃນດ້ານໂລຊິດສະຕິກ ແລະການຂົນສົ່ງທີ່ສູງ. ການປົກປ້ອງທາງດ້ານກົດໝາຍສຳລັບການເຮັດກະສິກຳແບບສັນຍາຜູກພັນສອງສົ້ນຂັດຂວາງການລົງທຶນຈາກຕ່າງປະເທດຂະໜາດໃຫຍ່ໃນການຜະລິດກະສິກຳເປັນສິນຄ້າ ແລະ ຊາວນາຊາວສວນຂະໜາດນ້ອຍສ່ວນໃຫຍ່ແມ່ນປະກອບອາຊີບກະສິກຳແບບກຸ້ມຕົນເອງພໍໃຊ້ພໍລາວໂດຍມີການເຂົ້າເຖິງແຫລ່ງເງິນທຶນຫຼືເຕັກນິກການກະສິກຳທີ່ທັນສະໄໝໃນຂອບເຂດຈຳກັດ.

211. **ການຄວບຄຸມການສະໜອງວັດຖຸປະກອບຂອງກະສິກຳໂດຍການອອກໃບອະນຸຍາດນຳເຂົ້າ, ຂໍ້ກຳນົດທີ່ໃຫ້ມີໃບອະນຸຍາດນຳເຂົ້າ, ການກວດກາ ແລະ ການຜ່ານຂັ້ນຕອນຂອງພາສີທີ່ບໍ່ຈຳເປັນ ກໍແມ່ນສ່ວນໜຶ່ງທີ່ເຮັດໃຫ້ລາຄາວັດຖຸປະກອບຮັບໃຊ້ກະສິກຳມີລາຄາສູງຂຶ້ນ ແລະ ດ້ວຍເຫດນີ້ຕົ້ນທຶນການຜະລິດກໍຈຶ່ງສູງຕາມມາ.** ໃນປັດຈຸບັນ, ມີພຽງແຕ່ຜູ້ສະໜອງທາງການຄ້າຫຼືຟາມປູກຝັງ-ລ້ຽງສັດ (ປົກກະຕິແມ່ນພວກຂ້ອນຂ້າງໃຫຍ່) ທີ່ມີໃບອະນຸຍາດດຳເນີນທຸລະກິດ, ທີ່ໄດ້ຮັບໃບອະນຸຍາດນຳເຂົ້າຈາກກະຊວງກະສິກຳແລະປ່າໄມ້ (MOAF), ຈຶ່ງໄດ້ຮັບອະນຸຍາດໃຫ້ນຳເຂົ້າມາໃນປະເທດ, ບໍ່ວ່າຈະເພື່ອການນຳໃຊ້ຂອງຕົນເອງຫຼືເພື່ອມາຂາຍ ສຳລັບປະເພດ ອາຫານສັດ, ປຸ໋ຍ, ຢາປາບສັດຕູພືດ ແລະ ວັດຖຸປະກອບຮັບໃຊ້ກະສິກຳ ທີ່ສຳຄັນອື່ນໆ. ກ່ອນທີ່ຈະນຳເຂົ້າສິນຄ້າ, ຜູ້ນຳເຂົ້າຕ້ອງຂໍໃບອະນຸຍາດນຳເຂົ້າຈາກ MOAF. ຈາກນັ້ນ MOAF ຈະສົ່ງເຈົ້າໜ້າທີ່ຂອງຕົນ ພ້ອມດ້ວຍເຈົ້າໜ້າທີ່ຈາກ MOIC ແລະ ຫ້ອງການພາສີ ລົງກວດກາສະຖານທີ່ ເພື່ອຢັ້ງຢືນຄວາມຕ້ອງການຕົວຈິງ ແລະ ກຳນົດຈຳນວນທີ່ອະນຸຍາດໃຫ້ນຳເຂົ້າ. ໄດ້ຍົກເອົາຫຼາຍກໍລະນີມາສົນທະນາໂດຍຫຍໍ້ຢູ່ຂ້າງລຸ່ມນີ້ເພື່ອເນັ້ນໃຫ້ເຫັນເຖິງວ່າວິທີການທີ່ຂໍ້ກຳນົດດ້ານລະບຽບການໄດ້ສົ່ງຜົນຮັບແນວໃດຕໍ່ຕົ້ນທຶນທີ່ສູງຂອງວັດຖຸປະກອບຮັບໃຊ້ກະສິກຳ, ເຊິ່ງເປັນການທຳລາຍການແຂ່ງຂັນຂອງຜະລິດຕະພັນສິນຄ້າກະສິກຳຂອງ ສປປ ລາວ.

212. **ການນຳເຂົ້າອາຫານສັດ ກໍຕ້ອງໄດ້ປະຕິບັດຕາມຂໍ້ກຳນົດການນຳເຂົ້າ ທີ່ເປັນພາລະຫຍຸ້ງຍາກ.** ສ່ວນຫຼາຍ, ອາຫານສັດທີ່ນຳເຂົ້າແມ່ນໄດ້ຮັບການຍົກເວັ້ນພາສີ, ແຕ່ມັນຍັງຢູ່ພາຍໃຕ້ການຄວບຄຸມທາງດ້ານບໍລິຫານໂດຍ MOAF ໃນລັກສະນະດຽວກັນກັບຝຸ່ນ ແລະລິດໄຖນາ. ການສຶກສາຂະບວນການທາງທຸລະກິດກ່ຽວກັບການນຳເຂົ້າອາຫານສັດຈາກໜອງຄາຍ ຂອງໄທມານະຄອນຫຼວງວຽງຈັນ ໂດຍ ຄຳມາວົງສາ (2014) ໄດ້ໃຈໃຫ້ເຫັນວ່າມີ 7 ຂັ້ນຕອນທີ່ກ່ຽວຂ້ອງກັບລະບຽບວິທີປະຕິບັດທາງດ້ານບໍລິຫານຂອງລັດຖະບານ, ເຊິ່ງບາງຂັ້ນຕອນແມ່ນບໍ່ຈຳເປັນ ແລະ ຫລາຍເກີນໄປ. ການສຶກສາດັ່ງກ່າວພົວພັນຜູ້ນຳເຂົ້າ, ຟາມລ້ຽງສັດ ໃນນະຄອນຫຼວງວຽງຈັນ ທີ່ມີໃບອະນຸຍາດດຳເນີນທຸລະກິດ, ມີໃບຢັ້ງຢືນຢ່າງເປັນທາງການຂອງພາສີ ແລະ ໃບອະນຸຍາດນຳເຂົ້າ-ສົ່ງອອກ ຕາມທີ່ຮຽກຮ້ອງຕ້ອງການ. ເຈັດຂັ້ນຕອນປະກອບມີ:

1. ການຂໍອະນຸຍາດນຳເຂົ້າອາຫານສັດ, ເຊິ່ງຮຽກຮ້ອງຕ້ອງການເອກະສານຕ່າງໆ.
2. ເຈົ້າໜ້າທີ່ຈາກ 3 ອົງການຈັດຕັ້ງຕ່າງໆ ລົງກວດກາສະຖານທີ່ຂອງຟາມກະສິກຳ ເພື່ອປະເມີນຄວາມຕ້ອງການຂອງຟາມ ແລະ ຈຳນວນທີ່ຕ້ອງການນຳເຂົ້າປະຈຳປີ ຄື: ຂະແໜງລ້ຽງສັດ ແລະ ການປະມົງ ນະຄອນຫຼວງວຽງຈັນ (VCLFD), ຂະແໜງການຄ້າ ນະຄອນຫຼວງວຽງຈັນ (VCTD) ແລະ ຂະແໜງພາສີ ນະຄອນຫຼວງວຽງຈັນ (VCCD).)
3. ຜູ້ນຳເຂົ້າ ກະກຽມ ແລະ ຍື່ນເອກະສານຕໍ່ຫ້ອງການພາສີຢູ່ດ່ານ ເພື່ອຂໍອະນຸມັດຈາກຫົວໜ້າຫ້ອງການພາສີ.
4. ສິນຄ້ານຳເຂົ້າຖືກກວດກາໂດຍເຈົ້າໜ້າທີ່ກັກກັນຢູ່ດ່ານ.
5. ສິນຄ້ານຳເຂົ້າຖືກກວດກາໂດຍເຈົ້າໜ້າທີ່ພາສີຢູ່ດ່ານ.
6. ພາຍຫຼັງໄດ້ຮັບການກວດຜ່ານເອກະສານຈາກຕຳຫຼວດກວດຄົນເຂົ້າເມືອງຢູ່ດ່ານແລ້ວ, ສິນຄ້າແມ່ນໄດ້ຂົນສົ່ງໄປຮອດຈຸດໝາຍປາຍທາງທີ່ກຳນົດໄວ້ໂດຍມີຕຳຫຼວດຈະລາຈອນ ເພື່ອຮັບປະກັນການຈັດສົ່ງເຖິງສະຖານທີ່ທີ່ສະເໜີ.

7. ພາຍໃນ 7 ວັນຫຼັງຈາກໄດ້ຮັບສິນຄ້າ, ຜູ້ນໍາເຂົ້າຈະຕ້ອງໄດ້ຮັບຄວາມເຫັນຊອບຕໍ່ເອກະສານນໍາເຂົ້າທັງໝົດຈາກຫ້ອງການພາສີຢູ່ບ່ອນຍື່ນເອກະສານ ປ່ອງໝາຍເລກ 5.

213. **ຂັ້ນຕອນການແຈ້ງພາສີທີ່ມີຢູ່ປັດຈຸບັນເຮັດໃຫ້ມີຄ່າໃຊ້ຈ່າຍເພີ່ມຂຶ້ນ, ເປັນເຫດໃຫ້ເກີດຄວາມຫລ້າຊ້າ ແລະ ເຮັດໃຫ້ມີການສວຍໂອກາດສະແຫວງຫາຜົນປະໂຫຍດ.** ການສຶກສາໄດ້ຄາດຄະເນວ່າການປະຕິບັດຄົບ 7 ຂັ້ນຕອນນີ້ໃຊ້ເວລາປະມານ 4,5 ມື້, ແລະມີຄ່າໃຊ້ຈ່າຍຫຼຸບເທົ່າ 500 ໂດລາ ສໍາລັບການປະຕິບັດໃຫ້ສອດຄ່ອງຕາມຂັ້ນຕອນຕໍ່ປະລິມານສິນຄ້າທີ່ຂົນສົ່ງຄັ້ງໜຶ່ງ, ເຊິ່ງລວມມີການຈ່າຍເງິນແບບສະ ໝັກໃຈ 24,7 ສ່ວນຮ້ອຍສໍາລັບການເອົາດ່ວນ ແລະ 75,3 ສ່ວນຮ້ອຍສໍາລັບຄ່າທໍານຽມທາງການຕົວຈິງ. ໃນຂັ້ນຕອນທີ 2, ເມື່ອໄດ້ຮັບການອະນຸຍາດນໍາເຂົ້າ, ຮຽກຮ້ອງໃຫ້ທັງສາມພະແນກການຂອງລັດຖະບານມາການກວດການສະຖານທີ່ເຫັນວ່າຊໍ້າຊາກເກີນຄວາມຈໍາເປັນ, ຈາກບ່ອນດຽວ (ຄື VCLFD) ກໍຄວນພຽງພໍ. ໃນຂັ້ນຕອນທີ 6, ການກໍານົດຈຸດສົ່ງສິນຄ້າເກີນຄວາມຈໍາເປັນຂອງຜູ້ມອບສົ່ງສິນຄ້າທີ່ຈະຮູ້ຈັກບ່ອນມອບສົ່ງອາຫານສັດ ແລະ ໂດຍສະເພາະການມີຕໍາຫຼວດຈະລາຈອນຕິດຕາມໄປນໍາ ເພື່ອຮັບປະກັນໃຫ້ມີການມອບສົ່ງເຖິງສະຖານທີ່ທີ່ຕ້ອງໄປຮອດຢ່າງເປັນທາງການ ກໍ່ຖືວ່າບໍ່ຈໍາເປັນ. ມັນພຽງແຕ່ເປັນການເພີ່ມຄ່າໃຊ້ຈ່າຍ. ໃນຂັ້ນຕອນທີ 7, ຂໍ້ກໍານົດໃຫ້ກັບມາແຈ້ງພາສີຄືນເປັນທາງການຫຼັງຈາກສິນຄ້າໄດ້ຖືກຈັດສົ່ງໄປຮອດແລ້ວ ແມ່ນບໍ່ຈໍາເປັນອີກ. ເມື່ອໄດ້ສໍາເລັດລະບຽບການທາງພາສີ ກ່ອນທີ່ສິນຄ້າຈະອອກຈາກດ່ານພາສີຊາຍແດນ, ການຮຽກຮ້ອງໃຫ້ມີການແຈ້ງພາສີຕື່ມອີກແມ່ນພຽງແຕ່ເປັນຂອດຊໍ້າຊາກ. ການກວດຜ່ານຂອງພາສີຢູ່ຈຸດດ່ານພາສີຊາຍແດນ ຄວນຮຽກຮ້ອງໃຫ້ມີຄັ້ງດຽວເທົ່ານັ້ນ.

214. **ຂັ້ນຕອນທີ່ຫຍຸ້ງເຫຍີງ ແລະ ບໍ່ຈໍາເປັນຊຸກຍູ້ໃຫ້ຜູ້ນໍາເຂົ້ານໍາໃຊ້ຊ່ອງທາງທີ່ບໍ່ເປັນທາງການ ເຊິ່ງເປັນການບັ່ນທອນເຈດຕະນາຂອງລະບຽບການທີ່ແນໃສ່ປົກປ້ອງ.** ໂດຍລວມແລ້ວ, ຂັ້ນຕອນທີ່ຫຍຸ້ງເຫຍີງ ແລະ ບໍ່ຈໍາເປັນເຮັດໃຫ້ເກີດຄວາມຫລ້າຊ້າ ແລະສ້າງໃຫ້ມີຊ່ອງວ່າງສໍາລັບການຈ່າຍເງິນທີ່ບໍ່ເປັນທາງການເພື່ອເລັ່ງຂະບວນການ. ນອກຈາກນັ້ນ, ສິ່ງເຫຼົ່ານີ້ຍັງຊຸກຍູ້ໃຫ້ຜູ້ນໍາເຂົ້ານໍາໃຊ້ຊ່ອງທາງທີ່ 'ບໍ່ເປັນທາງການ' ເຊິ່ງເຮັດໃຫ້ປະຊາຊົນທົ່ວໄປແລະສະພາບແວດລ້ອມຕົກຢູ່ໃນຄວາມສ່ຽງ ແລະ ບໍ່ສາງລາຍຮັບຫຍັງ.

215. **ການນໍາເຂົ້າປຸ໋ຍກໍ່ຢູ່ພາຍໃຕ້ບັງຄັບຂອງໂກຕາ ແລະ ຕ້ອງການໃຫ້ມີໃບອະນຸຍາດ.** ຕາມການໃຫ້ສໍາພາດຂອງເຈົ້າໜ້າທີ່ກົມປູກຝັງຂອງກະຊວງ, ເຈົ້າໜ້າທີ່ຈະກໍານົດໂກຕາການນໍາເຂົ້າ ແລະ ນໍາໃຊ້ຝຸ່ນເຄມີສໍາລັບແຕ່ລະຂົງເຂດກະສິກໍາ, ໂດຍປົກກະຕິຈະແຍກກັນໂດຍອີງຕາມເຂດຊາຍແດນເມືອງ, ສໍາລັບຜູ້ສະໜອງທາງການຄ້າທີ່ຈະນໍາເຂົ້າເພື່ອມາຂາຍ. ສໍາລັບຟາມຂະໜາດໃຫຍ່, ທີ່ມີໃບອະນຸຍາດດໍາເນີນທຸລະກິດ, ເຊິ່ງຕ້ອງການນໍາເຂົ້າເພື່ອການນໍາໃຊ້ຂອງຕົນເອງ, ແມ່ນຈໍາເປັນຕ້ອງມີໃບອະນຸຍາດນໍາເຂົ້າທຸກຄັ້ງກ່ອນທີ່ຈະນໍາເຂົ້າຜະລິດຕະພັນສິນຄ້າທີ່ຕ້ອງມີໃບອະນຸຍາດຈາກ MOAF. ໃນຂະບວນການຂໍໃບອະນຸ ຍາດ, ເຈົ້າໜ້າທີ່ MOAF ຈະດໍາເນີນການກວດກາເພື່ອກໍານົດຄວາມຕ້ອງການຕົວຈິງ ແລະ ປະລິມານທີ່ຈະອະນຸຍາດໃຫ້ນໍາເຂົ້າ. ອີງຕາມການໃຫ້ສໍາພາດຂອງເຈົ້າໜ້າທີ່, ເຫດຜົນນີ້ແມ່ນເພື່ອປ້ອງກັນການສະ ໜອງເກີນແລະການນໍາໃຊ້ເກີນ. ການໃຊ້ຝຸ່ນເຄມີຫຼາຍເກີນໄປສາມາດສົ່ງຜົນກະທົບທາງລົບຕໍ່ຄຸນນະພາບຂອງທີ່ດິນ ແລະ ບາງທີ, ກໍ່ສົ່ງຜົນກະທົບໃນໄລຍະຍາວຕໍ່ລະບົບນິເວດ. ການຄວບຄຸມທາງບໍລິຫານນີ້ເປັນການຈໍາກັດການສະໜອງແລະການສ້າງອໍານາດຜູກຂາດຢ່າງໄດ້ຜົນ ໃນໝູ່ຜູ້ສະໜອງຕາມທ້ອງທີ່ຕ່າງໆ, ທັງສອງມີທ່າອ່ຽງທີ່ຈະເຮັດໃຫ້ລາຄາສູງຂຶ້ນ.

### 6.2.3 ຄ່າຂົນສົ່ງ

216. **ລາຄາການຂົນສົ່ງພາຍໃນ ສປປ ລາວ ແລະ ການສົ່ງສິນຄ້າລະຫວ່າງປະເທດ ໂດຍທົ່ວໄປແລ້ວແມ່ນສູງກວ່າປະເທດເພື່ອນບ້ານ, ເຊິ່ງເຮັດໃຫ້ລາຄາສິນຄ້າສູງຂຶ້ນ ແລະ ທໍາລາຍຄວາມສາມາດແຂ່ງຂັນຂອງສິນຄ້າລາວທັງຢູ່ພາຍໃນ ແລະ ຢູ່ຕ່າງປະເທດ.** ວິທີປະຕິບັດໃນການອອກໃບອະນຸຍາດການຂົນສົ່ງສິນຄ້າກໍເປັນເຫດຜົນໜຶ່ງທີ່ເຮັດໃຫ້ການຂົນສົ່ງບໍ່ມີປະສິດທິພາບຍ້ອນວ່າມັນຈໍາກັດການແຂ່ງຂັນ. ດັ່ງທີ່ໄດ້ກ່າວໄວ້ກ່ອນໜ້ານີ້, ລາຄາຂົນສົ່ງຂອງ ສປປ ລາວ ແມ່ນສູງກວ່າລາຄາຂົນສົ່ງລົດບັນທຸກຂອງໄທ; ລົດບັນທຸກຂອງໄທ ທີ່ສົ່ງສິນຄ້າຈາກໄທ ເຂົ້າມາ ສປປ ລາວ ມີການບັນທຸກສິນຄ້າເຕັມຄັນລົດ ໃນເວລາເດີນທາງກັບຄືນໄປປະເທດໄທ, ສ່ວນລົດບັນທຸກ ຂອງລາວ ທີ່ສົ່ງໄປປະເທດໄທ ບໍ່ມີສິນຄ້າຂົນຕອນຂາກັບ. ຂໍ້ສະເໜີແນະສໍາລັບການຫຼຸດຜ່ອນຕົ້ນທຶນຄ່າໃຊ້ຈ່າຍໃນການຂົນສົ່ງທີ່ຂ້ອນຂ້າງສູງແມ່ນໄດ້ລະບຸໄວ້ໃນບົດທີ 5.

217. ການທີ່ເຈົ້າໜ້າທີ່ຈະລາຈອນສັ່ງຢຸດເພື່ອກວດລົດເລື້ອຍໆກໍເຮັດໃຫ້ຕົ້ນທຶນຄ່າໃຊ້ຈ່າຍເພີ່ມຂຶ້ນ. ໄດ້ມີການລາຍງານເລື່ອງການທີ່ຈະລາຈອນຢຸດກວດລົດສິນຄ້າທີ່ເຄື່ອນຍ້າຍຂ້າມເມືອງ ແລະ ແຂວງຕ່າງໆ ວ່າເປັນບັນຫາທົ່ວໄປຂອງພໍ່ຄ້າ (ບາງຄົນແມ່ນຜູ້ຜະລິດເອງ). ເຖິງວ່າຈຸດປະສົງທາງການໃນການຢຸດກວດລົດໂດຍຈະລາຈອນແມ່ນຖືກຕ້ອງຕາມກົດໝາຍ, ເພື່ອຢຸດຕິການລັກລອບໜີພາສີໃນການຂົນສິນຄ້າທີ່ຖືກຕ້ອງ ແລະ ຜິດກົດໝາຍ, ແຕ່ມັນກໍໄປເພີ່ມໃຫ້ຄ່າຂົນສົ່ງສິນຄ້າທີ່ຖືກກົດໝາຍໂດຍບໍ່ຈໍາເປັນ. ການຢຸດລົດແຕ່ລະຄັ້ງໃນຕົວມັນກໍແມ່ນຄ່າໃຊ້ຈ່າຍອັນໜຶ່ງ, ເນື່ອງຈາກການຊັກຊ້າໃນການຈັດສົ່ງແລະຜົນກະທົບຂອງມັນຕໍ່ອາຍຸການເກັບຮັກສາສິນຄ້າກະສິກໍາ; ເຈົ້າໜ້າທີ່ມັກຈະຮ້ອງຂໍໃຫ້ມີການຈ່າຍເງິນບາງຢ່າງຈາກຜູ້ຂົນສົ່ງ. ການຢຸດກວດລົດໂດຍຈະລາຈອນແມ່ນໃຊ້ເປັນໂອກາດໃນການເກັບອາກອນສໍາລັບສິນຄ້າທີ່ກໍາລັງຂົນສົ່ງນັ້ນ. ຕົວຢ່າງເຊັ່ນ: ທ້າຍໄຕມາດທີ 1 ປີ 2020, ຢູ່ເຂດພູພຽງບໍລະເວນ ໄດ້ມີລົດຂົນສົ່ງກາເຟຖືກຕໍາຫຼວດຈະລາຈອນສັ່ງໃຫ້ຢຸດກວດເພື່ອເກັບອາກອນ; ກະຊວງການເງິນ ປະກາດວ່າ ການເກັບອາກອນ ດັ່ງກ່າວ ແມ່ນຜິດກົດໝາຍ, ອີງຕາມສະມາຄົມ ກາເຟລາວ (LCA), ປີ 2020. ການຢຸດກວດລົດຕາມເສັ້ນທາງເພື່ອກວດກາການເສຍອາກອນ ແລະ ກວດການລັກລອບຂົນສົ່ງສິນຄ້າຜິດກົດໝາຍ ໄດ້ສ້າງໂອກາດໃຫ້ເຈົ້າໜ້າທີ່ງບໍ່ດີສວຍໂອກາດ ບີບເອົາຄ່າ

ທຳນຽມທີ່ບໍ່ເປັນທາງການ ຈາກຜູ້ຂົນສົ່ງທີ່ຖືກຕ້ອງຕາມກົດໝາຍ, ດັ່ງນັ້ນຈຶ່ງເປັນການເພີ່ມດ້ານຕົ້ນທຶນຄ່າໃຊ້ຈ່າຍ.

218. ຄ່າຂົນສົ່ງສິນຄ້າຈາກວຽງຈັນໄປຕ່າງປະເທດ ແມ່ນສູງກວ່າຈາກທ່າເຮືອປະເທດໃກ້ຄຽງ. ການສຶກສາໂດຍ Ishida (2017) ພົບວ່າຄ່າໃຊ້ຈ່າຍໃນການຂົນສົ່ງຕູ້ຄອນເທນເນີ 40 ຟຸດໄປຫາທ່າເຮືອໂຢໂກຮາມາ, ປະເທດຍີ່ປຸ່ນ, ຈາກວຽງຈັນໄປແມ່ນສອງເທົ່າ ຂອງຄ່າຂົນສົ່ງຈາກບາງກອກ ແລະຈາກພະນົມເປັນ; ຫຼາຍກວ່າສອງເທົ່າຈາກຮ່າໂນ້ຍ; ປະມານແປດເທົ່າ ຂອງການຂົນສົ່ງຈາກນະຄອນໂຮ່ຈິມິນ; ແລະປະມານ 60 ສ່ວນຮ້ອຍຫຼາຍກວ່າການຂົນສົ່ງຈາກນິວເດລີ (ຮູບ 6.1). ການຄົ້ນພົບທີ່ສຳຄັນແມ່ນວ່າ ສຳລັບຄ່າຂົນສົ່ງທັງໝົດຈາກວຽງຈັນ ຫາ ທ່າເຮືອໂຢໂກຮາມາ 2.500 ໂດລາ, ຄ່າຂົນສົ່ງ 40% ແມ່ນສຳລັບການຂົນສົ່ງລະຫວ່າງວຽງຈັນ-ໜອງຄາຍທີ່ມີແຕ່ 20 ກິໂລແມັດ, ຍ້ອນມູນຄ່າການຂົນສົ່ງ 700 ໂດລາ ລະຫວ່າງ ໜອງຄາຍ-ທ່າເຮືອບາງກອກ- ທ່າເຮືອແຫລມຊະບັງ , ແລະ $800 ຈາກທ່າເຮືອບາງກອກ ຫຼື ທ່າເຮືອແຫລມຊະບັງ ໄປຍັງທ່າເຮືອໂຢໂກຮາມາ. ຄ່າໃຊ້ຈ່າຍທີ່ສູງສຳລັບດ່ານຊາຍແດນລະຫວ່າງວຽງຈັນແລະໜອງຄາຍຂອງໄທກວມເອົາ 39,7 ສ່ວນຮ້ອຍ ຂອງຄ່າຂົນສົ່ງ 1.700 ໂດລາ ລະຫວ່າງວຽງຈັນແລະທ່າເຮືອບາງກອກຫຼືທ່າເຮືອແຫລມຊະບັງ. ນອກຈາກນັ້ນ, ການຂາດໂອກາດການຂົນສິນຄ້າຂາກັບຄືນຈາກວຽງຈັນ, ດັ່ງນັ້ນການເດີນທາງຂາກັບຈຶ່ງແລ່ນລົດເປົ່າ, ແມ່ນເຮັດໃຫ້ມີຕົ້ນທຶນຄ່າໃຊ້ຈ່າຍທີ່ສູງຂຶ້ນ.

219. ຄ່າທຳນຽມຢູ່ເບື້ອງຝັ່ງຊາຍແດນຂອງ ສປປ ລາວ ແມ່ນສູງກວ່າປະເທດເພື່ອນບ້ານ. Ishida ສະເໜີແນະວ່າ ລັດຖະບານ ສປປ ລາວ “ຄວນພະຍາຍາມຫຼຸດຄ່າທຳນຽມການແຈ້ງພາສີ ແລະ ຄ່າທຳນຽມຕູ້ຄອນເທນເນີເປົ່າໃຫ້ໜ້ອຍລົງຢ່າງຕ່ຳສຸດກໍ່ເທົ່າກັບຝ່າຍໄທ.” ນອກຈາກນັ້ນ, Ishida ກໍຍັງແນະນຳວ່າອຳນາດການປົກຄອງທັງສອງຄວນຮ່ວມມືກັນ ເພື່ອຫຼຸດຜ່ອນຄ່າໃຊ້ຈ່າຍທີ່ກ່ຽວຂ້ອງກັບການຂ້າມຊາຍແດນ.

**ຮູບທີ 6.1 ຄ່າຈັດສົ່ງຕູ້ຄອນເຕັນເນີ 40 ຟຸດ ຈາກທ່າເຮືອ ໂຢໂກຮາມາ, ຍີ່ປຸ່ນ**




*ແຫຼ່ງຂໍ້ມູນ: Ishida (2017). ຄ່າໃຊ້ຈ່າຍທາງດ້ານໂລຊິດສະຕິກໃນສາທາລະນະລັດປະຊາທິປະໄຕປະຊາຊົນລາວ, ສະຖາບັນເສດຖະກິດກຳລັງພັດທະນາ, ອົງການການຄ້າພາຍນອກຂອງຍີ່ປຸ່ນ.*

*ໝາຍເຫດ: ແກນຕັ້ງຫົວໜ່ວຍເປັນໂດລາສະຫະລັດ, ແກນນອນເປັນຊື່ບັນດານະຄອນຈາກຊ້າຍຫາຂວາມື ມີ ເຊີນເຈີ້ນ, ຮົງກົງ, ໄທເປ, ໂກລາລຳເປີ, ຈາກາຕາ, ມານີລາ, ບາງກອກ, ຮ່າໂນ້ຍ, ນະຄອນໂຮຈິມິນ, ວຽງຈັນ, ພະນົມເປັນ, ຢ້າງກຸ້ງ, ນິວເດັບລີ.*

### 6.2.4 ຜົນກະທົບຂອງການຄວບຄຸມຂອງລັດຖະບານຕໍ່ໂຄງປະກອບຂອງຕະຫລາດ

220. **ການປະຕິບັດການອອກໃບອະນຸຍາດນຳເຂົ້າເປັນການຈຳກັດການພັດທະນາຕະຫຼາດທີ່ມີການແຂ່ງຂັນສຳລັບວັດຖຸປະກອບຮັບໃຊ້ກະສິກຳ.** ບັນຫາທີ່ຕິດພັນກັບໂຄງປະກອບຕະຫຼາດໃນອຸດສະຫະກຳການສະໜອງວັດຖຸປະກອບຮັບໃຊ້ກະສິກຳໃນ ສປປ ລາວ ສ່ວນໃຫຍ່ແມ່ນມາຈາກການຄວບຄຸມທາງດ້ານບໍລິຫານຂອງລັດຖະບານຕໍ່ການສະໜອງ ໂດຍການໃຫ້ຂໍ້ອະນຸຍາດນຳເຂົ້າ. ການອອກອະນຸຍາດນຳເຂົ້າແລະການປະຕິບັດການອອກໃບອະນຸຍາດນຳເຂົ້າແຕ່ລະຄັ້ງເປັນການເພີ່ມຕົ້ນທຶນຂອງການນຳເຂົ້າແລະຈຳກັດການສະໜອງ. ສິ່ງເຫລົ່ານີ້ຍັງສ້າງອຳນາດຜູກຂາດໃຫ້ແກ່ຜູ້ສະໜອງ

ໃນທ້ອງຖິ່ນຢ່າງມີພົນ. ຕົ້ນທຶນຄ່າໃຊ້ຈ່າຍໃນການນໍາເຂົ້າທີ່ເພີ່ມຂຶ້ນໂດຍຂັ້ນຕອນທີ່ກໍານົດຢ່າງເປັນທາງການເຫຼົ່ານີ້ ລວມມີບາງຂໍ້ກໍານົດທີ່ບໍ່ຈໍາເປັນທີ່ເຮັດໃຫ້ເສຍເວລາແລະຄ່າໃຊ້ຈ່າຍ, ດັ່ງທີ່ໄດ້ກ່າວສັ້ນໆກ່ອນຫນ້ານີ້ສໍາລັບການນໍາເຂົ້າອາຫານສັດໂດຍຜູ້ປະກອບການລ້ຽງສັດໃນນະຄອນຫຼວງວຽງຈັນ. ຍິ່ງໄປກວ່ານັ້ນ, ຕາມການສັງເກດ ຂອງທະນາ ຄານໂລກ (2016), ຄ່າໃຊ້ຈ່າຍທີ່ກ່ຽວຂ້ອງກັບການໄດ້ຮັບໃບອະນຸຍາດດໍາເນີນການແລະໃບອະນຸຍາດນໍາເຂົ້າແຕ່ລະຄັ້ງແມ່ນສູງກວ່າສໍາລັບຜູ້ນໍາເຂົ້າໃນຕ່າງແຂວງ, ເນື່ອງຈາກການອອກໃບອະນຸຍາດສ່ວນໃຫຍ່ແມ່ນລວມສູນຢູ່ນະຄອນຫຼວງວຽງຈັນ, ເຊິ່ງຮຽກຮ້ອງໃຫ້ຜູ້ນໍາເຂົ້າຕ້ອງໄດ້ໃຊ້ຈ່າຍເງິນຢູ່ໃນແຂວງ ແລະຢູ່ ນະຄອນຫຼວງ.

221. **ເມື່ອຍື່ນຂໍໃບອະນຸຍາດດໍາເນີນການ ແລະ ໃບອະນຸຍາດນໍາເຂົ້າ, ຜູ້ປະກອບການກະສິກໍາຕ້ອງມີຕົວເລກປະລິມານທີ່ເຈົ້າໜ້າທີ່ເປັນຜູ້ຄາດຄະເນໃຫ້.** ສໍາລັບຜູ້ນໍາເຂົ້າທີ່ເປັນຜູ້ຈັດຈໍາຫນ່າຍ, ຕະຫຼາດຂອງເຂົາເຈົ້າຖືກຈໍາກັດໂດຍການຄາດຄະເນທີ່ເປັນທາງການດ້ານຄວາມຕ້ອງການໃນເຂດ ຫຼື ເມືອງທີ່ກໍານົດ. ການສຶກສາໂດຍ ຄໍາມະວົງສາ (2014) ໄດ້ອ້າງວ່າ ເວລາຈະນໍາລົດຂົນສົ່ງອາຫານສັດທີ່ນໍາເຂົ້າ ໄປສົ່ງ ບາງຄັ້ງກໍແມ່ນຕ້ອງໃຫ້ມີຕໍາຫຼວດຈະລາຈອນໄປນໍາລົດ ເພື່ອຮັບປະກັນໄດ້ວ່າ ການຈັດສົ່ງຈະໄປເຖິງທີ່ຢູ່ທີ່ສະເໜີໄວ້ໃນໃບອະນຸຍາດນໍາເຂົ້າ. ອັນນີ້ເປັນການຈໍາກັດການສະໜອງຢູ່ທ້ອງຖິ່ນຢ່າງມີພົນ, ເປັນການຢັບຢັ້ງການແຂ່ງຂັນລະຫວ່າງຜູ້ສະໜອງ ແລະ ເພີ່ມຕົ້ນທຶນ.

**6.2.5 ການປັບປຸງການເຂົ້າເຖິງແຫຼ່ງເມັດພັນ ແລະ ຝຸ່ນ**

222. **ການອອກໃບອະນຸຍາດດໍາເນີນການນໍາເຂົ້າ ແລະ ໃບອະນຸຍາດນໍາເຂົ້າແຕ່ລະຄັ້ງ ສໍາລັບວັດຖຸປະກອບຮັບໃຊ້ກະສິກໍາ (ອາຫານ, ແກ່ນພືດ, ຝຸ່ນ, ເຄື່ອງຈັກ) ຄວນໄດ້ລຶບລ້າງ.** ໃນເດືອນກັນຍາ 2020, ລັດຖະບານໄດ້ອອກຄໍາສັ່ງຂອງລັດຖະມົນຕີເພື່ອຍົກເລີກໃບອະນຸຍາດໃຫ້ຊາວກະສິກອນທີ່ຕ້ອງການນໍາເຂົ້າລົດໄຖນາເດີນຕາມເພື່ອມາໃຊ້ເອງ, ໂດຍກໍານົດໃຫ້ມີລົດໄຖນາໜຶ່ງຄັນຕໍ່ຄອບຄົວ.[29] ການຜ່ອນຄາຍການຄວບຄຸມການນໍາເຂົ້ານີ້ຍັງໄດ້ຂະຫຍາຍໄປສູ່ຜູ້ນໍາເຂົ້າ - ຜູ້ສະຫນອງທາງການຄ້າທີ່ໄດ້ຮັບອະນຸຍາດແລ້ວ. ໃນນີ້ແມ່ນໄດ້ລຶບລ້າງເງື່ອນໄຂຂໍ້ກໍານົດເພື່ອບໍ່ໃຫ້ຜູ້ສະໜອງທີ່ໄດ້ຮັບອະນຸຍາດດໍາເນີນການແລ້ວ ຕ້ອງຍື່ນຂໍໃບອະນຸຍາດແຕ່ລະຄັ້ງໃນການນໍາເຂົ້າລົດໄຖນາແຕ່ລະຄັນ, ຕາມການໃຫ້ສໍາພາດ ຂອງເຈົ້າໜ້າທີ່ຜູ້ໜຶ່ງຂອງ ກົມການນໍາເຂົ້າ ແລະ ສົ່ງອອກ, ກະຊວງ ອຄ (MOIC)[30]. ສິ່ງນີ້ຄາດວ່າຈະເປັນຜົນດີຕໍ່ຊາວກະສິກອນເນື່ອງຈາກການກະທົບຕໍ່ການແຂ່ງຂັນຂອງຕະຫຼາດ, ເພາະວ່າຊາວກະສິກອນສ່ວນຫຼາຍຈະບໍ່ສາ ມາດນໍາເຂົ້າລົດໄຖນາໄດ້ໂດຍກົງ. ຄາດວ່າເຂົາເຈົ້າຈະຕ້ອງຜ່ານຜູ້ສະໜອງ/ຜູ້ນໍາເຂົ້າທີ່ໄດ້ຮັບອະນຸຍາດທາງການຄ້າ. ແນວໃດກໍ່ຕາມ, ບັນດາກຸ່ມຊາວກະສິກອນ ຫຼື ສະຫະກອນທີ່ຢາກຈະນໍາເຂົ້າລົດໄຖນາເດີນຕາມ, ຕ້ອງໄດ້ຮັບການພິສູດ ແລະ ອະນຸຍາດຈາກເຈົ້າໜ້າທີ່ກະສິກໍາ, ເປັນຜູ້ກໍານົດວ່າແຕ່ລະກຸ່ມຊາວກະສິກອນສາມາດນໍາເຂົ້າລົດໄຖນາໄດ້ຈັກຄັນ.

223. **ວັດຖຸປະກອບອື່ນໆທີ່ຮັບໃຊ້ການປູກຝັງລ້ຽງສັດ ເຊັ່ນ: ອາຫານສັດ, ແກ່ນພືດ, ຝຸ່ນ, ແລະ ອຸປະກອນກະສິກໍາ ຍັງສືບຕໍ່ຈໍາເປັນໃຫ້ມີອະນຸຍາດດໍາເນີນການນໍາເຂົ້າ ແລະໃບອະນຸຍາດແຕ່ລະຄັ້ງຈາກ MOAF.** ພິດຕິກໍາການອອກໃບອະນຸຍາດດໍາເນີນການນໍາເຂົ້າ ແລະ ໃບອະນຸຍາດແຕ່ລະຄັ້ງ ແລະ ລະບຽບວິທີການບໍລິຫານທີ່ບໍ່ຈໍາເປັນທີ່ຖືບັງຄັບໃຊ້ຢູ່ ເຮັດໃຫ້ເກີດຄວາມຫລ້າຊ້າ ແລະ ເຮັດໃຫ້ມີການຈ່າຍນອກລະບົບທາງການເພື່ອຈະເລັ່ງລັດຂະບວນການ. ໃນທີ່ສຸດ ຄ່າໃຊ້ຈ່າຍເຫຼົ່ານີ້ກໍຜ່ານໄປເປັນພາລະໃຫ້ຊາວກະ ສິກອນ. ນອກຈາກນັ້ນ, ສິ່ງເຫລົ່ານີ້ເປັນການຊຸກຍູ້ໃຫ້ຜູ້ນໍາເຂົ້ານໍາໃຊ້ຊ່ອງທາງທີ່ບໍ່ເປັນທາງການ ເຊິ່ງກະຕຸ້ນໃຫ້ມີການສວຍໂອກາດສະແຫວງຫາຜົນປະໂຫຍດ ແລະ ສ້າງຄວາມສ່ຽງດ້ານຄວາມປອດໄພຕໍ່ປະຊາ ຊົນທົ່ວໄປ ແລະ ສິ່ງແວດລ້ອມ. ການປະຕິບັດຢ່າງເປັນທາງການ, ເຊິ່ງຮຽກຮ້ອງໃຫ້ມີການກວດກາສະຖານທີ່ເພື່ອຄາດຄະເນຄວາມຕ້ອງການ ແລະ ກໍານົດໂກຕາການນໍາເຂົ້າສິນຄ້າກະສິກໍາສໍາລັບຜູ້ນໍາເຂົ້າ/ ຜູ້ປະກອບການກະສິກໍາແຕ່ລະຄົນ, ບໍ່ແມ່ນການບໍລິການຮັບໃຊ້ໃຫ້ຂະແໜງກະສິກໍາ. ຂໍ້ບັງຄັບໃນປັດຈຸບັນທີ່ມີການອະນຸຍາດການນໍາເຂົ້າ, ເຊິ່ງຮຽກຮ້ອງໃຫ້ມີການກວດກາສະຖານທີ່ໂດຍສາມພາກສ່ວນຂອງລັດ (ຄື ພາກສ່ວນລ້ຽງສັດ ແລະ ການປະມົງ, ການຄ້າ, ພາສີ), ແມ່ນຊໍ້າຊາກເກີນຄວາມຈໍາເປັນ; ມີແຕ່ VCLFD ກໍຄວນຈະພຽງພໍແລ້ວ.

224. **ຊາວກະສິກອນ ແລະ ຜູ້ຈັດການຟາມແມ່ນຜູ້ກໍານົດທີ່ດີທີ່ສຸດກ່ຽວກັບປະເພດ ແລະ ຈໍານວນວັດຖຸປະກອບຮັບໃຊ້ກະສິກໍາທີ່ຕ້ອງການ.** ຖ້າການໃຊ້ປຸ່ຍເຄມີຫຼາຍເກີນໄປເປັນອັນຕະລາຍ, ຊາວກະສິກອນເອງຈະຮັບພາລະຄ່າໃຊ້ຈ່າຍ ແລະ ຈາກປະສົບການກໍ່ຈະນໍາເຂົາເຈົ້າໄປສູ່ການປັບປະລິມານການໃຊ້ທີ່ເຫມາະສົມທີ່ສຸດ. ແທນທີ່ຈະບອກຊາວກະສິກອນວ່າເຂົາເຈົ້າຕ້ອງການຝຸ່ນຫຼາຍປານໃດ ແລະ ອາດຈະນໍາເຂົ້າເທົ່າໃດ, ທາງທີ່ດີກວ່ານັ້ນ MOAF ຄວນເປັນຜູ້ເຮັດໜ້າທີ່ສຶກສາອົບຮົມຊາວກະສິກອນໂດຍວິທີການໃຫ້ບໍລິການດ້ານສົ່ງເສີມກະສິກໍາ, ໂດຍສະເພາະສໍາລັບຊາວກະສິກອນຂະຫນາດນ້ອຍ. ການປົກປັກຮັກສາສິ່ງແວດລ້ອມ ແລະສຸຂະພາບຂອງຄົນທີ່ພົວພັນ ກັບວິທີປະຕິບັດທາງດ້ານກະສິກໍາ ດີທີ່ສຸດແມ່ນຈະບັນລຸໄດ້ ດ້ວຍການສຶກສາອົບຮົມ ແລະ ການບັງຄັບໃຊ້ກົດຫມາຍ.

225. **ຍົກເລີກການກໍານົດຈຸດລົງເຄື່ອງ ແລະ ຂັ້ນຕອນລະບຽບການພາສີທີ່ຊໍ້າຊາກ.** ມີແຕ່ຄົນຂັບລົດຂົນສົ່ງຜູ້ດຽວເປັນຜູ້ຮູ້ບ່ອນສົ່ງອາຫານສັດ ກໍຖືວ່າພຽງພໍ; ການມີຕໍາຫຼວດຈະລາຈອນໄປສົ່ງນໍາເພື່ອຮັບປະ ກັນວ່າຈະໄປສົ່ງຢູ່ສະຖານທີ່ໆກໍານົດນັ້ນແມ່ນບໍ່ຈໍາເປັນ. ຄວນປ່ອຍໃຫ້ຊາວກະສິກອນຫຼືພໍ່ຄ້າທີ່ນໍາເຂົ້າວັດຖຸປະກອບຮັບໃຊ້ກະສິກໍາ ມີສິດທິໃນການຂົນເຄື່ອງໄປສົ່ງຢູ່ບ່ອນໃດຈະເຫມາະສົມກັບຄວາມຕ້ອງການຂອງເຂົາເຈົ້າທີ່ສຸດ, ເຊິ່ງອາດຈະມີການປ່ຽນແປງຕາມໄລຍະເວລາ. ການຄວບຄຸມທາງດ້ານບໍລິຫານຕໍ່ການຈັດຈໍາໜ່າຍວັດຖຸປະກອບຮັບໃຊ້ກະສິກໍາ ພຽງແຕ່ເປັນການສ້າງໃຫ້ເກີດຄວາມບໍ່ມີປະສິດທິພາບ.

29. ຄໍາສັ່ງກະຊວງອຸດສາຫະກໍາ ແລະ ການຄ້າ ສະບັບເລກທີ 0807/ອຄ. ກນສ, ນະຄອນຫຼວງວຽງຈັນ, ວັນທີ 2 ກັນຍາ 2020.
30. ການໃຫ້ສໍາພາດຄັ້ງວັນທີ 30 ກັນຍາ 2020.

ການແຈ້ງພາສີຢູ່ດ່ານຊາຍແດນ ຄວນເປັນຈຸດກວດຜ່ານບ່ອນດຽວທີ່ໄດ້ກໍານົດໃຫ້. ຂໍ້ກໍານົດທີ່ເປັນທາງທີ່ຮຽກຮ້ອງໃຫ້ປະຕິບັດລະບຽບການທາງພາສີ, ພາຍໃນເຈັດມື້ຫຼັງຈາກສິນຄ້າໄດ້ຖືກຈັດສົ່ງແລ້ວ, ແມ່ນຊໍ້າຊາກເກີນຄວາມຈໍາເປັນ.

226. **ຄ່າຂົນສົ່ງສາມາດຫຼຸດລົງໄດ້ໂດຍການເປີດເສລີໃນຕະຫຼາດ ແລະ ການເຮັດໃຫ້ຂັ້ນຕອນທີ່ກໍານົດໃຫ້ປະຕິບັດຢູ່ຈຸດຜ່ານແດນມີຄວາມງ່າຍດາຍຂຶ້ນ.** ການເປີດເສລີໃນຕະຫຼາດການຂົນສົ່ງ ສາມາດໃຫ້ຜົນປະ ໂຫຍດແກ່ຜູ້ໃຊ້ ໂດຍການຫລຸດຄ່າໃຊ້ຈ່າຍຂອງຜູ້ໃຊ້ໃຫ້ຕໍ່າລົງ. ການເຮັດໃຫ້ຂໍ້ກໍານົດການບໍລິຫານງ່າຍຂຶ້ນຍັງຈະເປັນການຫຼຸດຜ່ອນຄ່າໃຊ້ຈ່າຍໃນການຂົນສົ່ງສໍາລັບການນໍາເຂົ້າ ແລະການສົ່ງອອກ.

227. **ການຫຼຸດຜ່ອນຕົ້ນທຶນ ຂອງເຄື່ອງກົນຈັກກະສິກໍາ ຈະຊຸກຍູ້ໃຫ້ມີການລົງທຶນໃນເຕັກໂນໂລຊີດ້ານຊົນລະປະທານ.** ຄ່າໃຊ້ຈ່າຍສິ້ນເປືອງທີ່ສູງຂອງຊົນລະປະທານ ເຮັດໃຫ້ຊາວກະສິກອນຂະໜາດນ້ອຍບໍ່ເຮັດນາໃນລະດູແລ້ງ. ການເຮັດນາພຽງລະດູດຽວເຮັດໃຫ້ຊົນລະປະທານເພື່ອການປູກເຂົ້າແມ່ນບໍ່ສາມາດພັດທະນາໄປໄດ້ທາງດ້ານເສດຖະກິດ ເນື່ອງຈາກຜົນປະໂຫຍດດ້ານເສດຖະກິດສ່ວນຫຼາຍແມ່ນໄດ້ມາຈາກຊົນລະປະທານໃນລະດູແລ້ງ. ຕົ້ນທຶນທີ່ສູງຂອງຊົນລະປະທານເຮັດໃຫ້ຕົ້ນທຶນທາງດ້ານເສດຖະກິດຂອງອຸປະກອນ ແລະ ຂອງເຄື່ອງກົນຈັກກະສິກໍາເພີ່ມຂຶ້ນຍ້ອນວ່າເຄື່ອງເຫລົ່ານີ້ຈະຖືກປະໄວ້ໂດຍບໍ່ມີການໃຊ້ງານເປັນເວລາຫຼາຍເດືອນໃນແຕ່ລະປີ. ດັ່ງນັ້ນ, ການຫຼຸດຕົ້ນທຶນຊົນລະປະທານຈຶ່ງເປັນກຸນແຈສໍາຄັນໃນການເພີ່ມການຜະລິດເຂົ້າລະດູແລ້ງ ແລະ ເນື່ອແທ້ກໍແມ່ນເຮັດໃຫ້ຕົ້ນທຶນຂອງອຸປະກອນ ແລະ ຂອງເຄື່ອງກົນຈັກກະສິກໍາຫຼຸດໜ້ອຍລົງ. ສປປ ລາວ ຕ້ອງພິຈາລະນາຢ່າງຈິງຈັງກ່ຽວກັບການປະຕິຮູບຊົນລະປະທານເພື່ອຊຸກຍູ້ການລົງທຶນ ແລະ ການເປັນເຈົ້າຂອງໆພາກເອກະຊົນ. ລະບົບຊົນລະປະທານແບບຍືນຍົງຕ້ອງໄດ້ຮັບການພັດທະນາ ແລະດໍາເນີນງານໂດຍອີງໃສ່ຫຼັກການງ່າຍໆຂອງອັດຕາສ່ວນຜົນປະໂຫຍດ-ຕົ້ນທຶນທີ່ຫຼາຍກວ່າໜຶ່ງ; ການໃຫ້ເອກະຊົນເປັນເຈົ້າຂອງ ແລະ ດໍາເນີນງານຢ່າງເຕັມທີ່ ແມ່ນມີຄວາມສໍາຄັນ. ລະບົບຊົນລະປະທານສ່ວນໃຫຍ່ໃນ ສປປ ລາວ ມີຄ່າໃຊ້ຈ່າຍໃນການດໍາເນີນງານສູງ. ສ່ວນຫຼາຍ, ສິ່ງເຫຼົ່ານີ້ເປັນຜົນມາຈາກການອອກແບບບໍ່ດີ, ເຊັ່ນດຽວກັນກັບການໃຊ້ປະໂຫຍດອຸປະກອນຊົນລະປະທານ ໜ້ອຍເກີນໄປ. ອັນນີ້ຕົ້ນຕໍແມ່ນຍ້ອນລັດເປັນຜູ້ກໍານົດທິດ ຂອງການລົງທຶນ, ຄືງໄວ້ເຊິ່ງຄວາມເປັນເຈົ້າຂອງ, ອໍານວຍຄວບຄຸມການຈັດຕັ້ງປະຕິບັດ. ການຮັບປະກັນການລົງທຶນໃຫ້ມີປະສິດທິພາບກວ່ານີ້ ຮຽກ ຮ້ອງໃຫ້ພາກເອກະຊົນມີບົດບາດທີ່ຕັ້ງໜ້າກວ່າເກົ່າ, ລວມທັງການແບ່ງປັນຄວາມສ່ຽງ, ເພື່ອກະຕຸ້ນໃຫ້ຜູ້ຜະລິດລາຍນ້ອຍມີການເພີ່ມຜະລິດຕະພາບຂຶ້ນ.

## 6.3 ບາງຂະແໜງກະສິກໍາທີ່ໄດ້ຄັດເລືອກເອົາ: ການເຕີບໂຕ ແລະ ການປ່ຽນແປງໂຄງປະກອບ

228. **ພາກນີ້ມີການສະເໜີພາບລວມໂດຍຫຍໍ້ກ່ຽວກັບທ່າອ່ຽງໃຫຍ່ ຂອງເຂົ້າ, ພືດຜັກ, ກາເຟ, ກ້ວຍສໍາລັບລ້ຽງສັດ, ສາລີ ແລະ ພືດນໍ້າມັນ.** ເຂົ້າ ແລະ ສາລີເປັນພືດສະບຽງອາຫານຫຼັກທີ່ສໍາຄັນ ທີ່ຜູ້ຜະລິດລາຍນ້ອຍເປັນຜູ້ປູກ, ທັງເພື່ອບໍລິໂພກໃນຄອບຄົວ ແລະ ຂາຍໃນຕະຫຼາດ. ໃນເວລາດຽວກັນແຕ່ລະຂະແໜງກໍໄດ້ປະສົບກັບຂໍ້ຈໍາກັດສະເພາະ, ເຫັນໄດ້ຊັດເຈນວ່າສິ່ງທ້າທາຍທີ່ສອດຄ່ອງໄປໃນຂະແໜງ ຕ່າງໆທີ່ໄດ້ກໍານົດໄວ້ໃນບົດຕ່າງໆກ່ອນໜ້ານີ້ ແລະໃນພາກສິນທະນາເລື່ອງວັດຖຸປະກອບຮັບໃຊ້ກະສິກໍາ, ແມ່ນມີຄວາມຈໍາເປັນຕໍ່ການເພີ່ມການລົງທຶນ ແລະຜະລິດຕະພາບໃນກະສິກໍາ ແລະໃນການຂະຫຍາຍການເຊື່ອມຕໍ່ກັບອຸດສາຫະກໍາປຸງແຕ່ງ ແລະ ການທ່ອງທ່ຽວ. ການຈະບັນລຸໄດ້ເປົ້າໝາຍທີ່ໄດ້ກໍານົດໄວ້ໃນຮ່າງ NSEDP ແລະ ADS 2025 ສະບັບທີ 9 ຮຽກຮ້ອງໃຫ້ມີການປັບປຸງນະໂຍບາຍ ແລະ ສະພາບແວດລ້ອມດ້ານລະບຽບການ.

229. **ຂະແໜງການຍ່ອຍເຫຼົ່ານີ້ເປັນແຫຼ່ງລາຍໄດ້ຫຼັກ ຂອງປະຊາກອນປະມານ 2/3 ແລະ ຂອງກຸ່ມທີ່ທຸກຍາກທີ່ສຸດ.** ການແກ້ໄຂຂໍ້ຈໍາກັດໃນການເພີ່ມຜະລິດຕະພາບໃນຂະແໜງການຍ່ອຍເຫຼົ່ານີ້ ອາດຈະປະກອບ ສ່ວນຫຼຸດຜ່ອນຄວາມທຸກຍາກຢູ່ຊົນນະບົດໄດ້.

230. **ເຂົ້າ, ພືດຜັກ ແລະ ກາເຟ: ເຂົ້າແມ່ນ ຜົນລະປູກ ທີ່ສໍາຄັນທີ່ສຸດ ຂອງສປປ ລາວ ຍ້ອນວ່າມີສ່ວນແບ່ງການນໍາໃຊ້ທີ່ດິນ ແລະ ແຮງງານຫຼາຍ ແລະ ມີບົດບາດສໍາຄັນໃນການຄໍ້າປະກັນສະບຽງອາຫານ ເນື່ອງຈາກຄົນລາວບໍລິໂພກເຂົ້າເປັນປະຈໍາແຕ່ລະວັນ.** ພືດຜັກກໍໄດ້ເພີ່ມຄວາມສໍາຄັນຂຶ້ນເປັນການສ້າງວຽກເຮັດງານທໍາ ແລະລາຍໄດ້. ຊາວກະສິກອນລາຍນ້ອຍເກືອບວ່າທັງໝົດແມ່ນປູກຜັກສໍາລັບການບໍລິ ໂພກຂອງຕົນເອງ ແລະ ເພື່ອໃຫ້ມີລາຍໄດ້ເປັນເງິນສົດ; ກະສິກອນຈໍານວນໜ້ອຍໜຶ່ງ, ແຕ່ກໍມີການເພີ່ມ ຂຶ້ນ, ແມ່ນໄດ້ຖືບັນຫາການຜະລິດພືດຜັກເພື່ອຂາຍເປັນສິ່ງສໍາຄັນລະດັບຕົ້ນໆ. ກາເຟຖືວ່າເປັນພືດດັ້ງເດີມທີ່ປູກເພື່ອເປັນສິນຄ້າ ເຊິ່ງມີບົດບາດສໍາຄັນໃນການຫຼຸດຜ່ອນຄວາມທຸກຍາກ. ກາເຟ ເຮັດໃຫ້ເກີດມີວຽກເຮັດງານທໍາຢູ່ໃນສວນປູກ ແລະ ມີທ່າແຮງທາງດ້ານມູນຄ່າເພີ່ມທີ່ຍັງບໍ່ທັນໄດ້ໃຊ້ປະໂຫຍດ ເພື່ອສ້າງວຽກເຮັດງານທໍານອກສວນປູກ ແລະ ລາຍໄດ້ເພີ່ມເຕີມຕາມຂອດຕ່າງໆ ຂອງລະບົບຕ່ອງໂສ້ມູນຄ່າ.

231. **ການປູກພືດນໍ້າມັນ, ສາລີ ແລະ ການລ້ຽງສັດ: ໄດ້ມີການສົ່ງເສີມໃຫ້ຜູ້ຜະລິດລາຍນ້ອຍຖືເອົາສິ່ງເຫລົ່ານີ້ເປັນກາລະໂອກາດທາງການຄ້າ ເພື່ອຕື່ມເສີມໃຫ້ແກ່ການຜະລິດເຂົ້າ ແລະ ເພີ່ມລາຍໄດ້ຂອງເຂົາເຈົ້າ.** ສປປ ລາວ ໄດ້ວາງເປົ້າໝາຍເພື່ອພັດທະນາອຸດສາຫະກໍາການລ້ຽງສັດ; ແນວໃດກໍ່ຕາມ, ສິ່ງທ້າທາຍຫຼາຍຢ່າງຍັງຂັດຂວາງການເຕີບໂຕ. ສິ່ງທ້າທາຍຕົ້ນຕໍລວມມີລະດັບການລ້ຽງສັດ, ການບໍລິການສັດຕະວະແພດ, ໂຮງຂ້າສັດທີ່ຍັງດ້ອຍພັດທະນາ ແລະ ລະບົບການຈໍລະຈອນແຈກຢາຍທີ່ອ່ອນນ້ອຍ. ຕົ້ນທຶນທີ່ສູງ ຂອງອາຫານສັດທີ່ນໍາເຂົ້າກໍຍັງເປັນຂໍ້ຈໍາກັດ ເຊັ່ນກັນ.

### 6.3.1 ເຂົ້າ

232. **ເຂົ້າເປັນຜະລິດຕະພັນສິນຄ້າກະສິກຳ ແລະ ອາຫານຫຼັກຂອງ ສປປ ລາວ.** ມັນກວມເອົາເຄິ່ງຫນຶ່ງຂອງຜົນຜະລິດກະສິກຳທັງຫມົດຂອງປະເທດ (ADB, ເດືອນທັນວາ 2018) ແລະນຳໃຊ້ປະມານ 72 ສ່ວນຮ້ອຍຂອງເນື້ອທີ່ກະສິກຳທີ່ມີການປູກຝັງ (WB, ເດືອນມິຖຸນາ 2018[31]). ເສດຖະກິດລາວແມ່ນເປັນປະເທດຜູ້ສົ່ງອອກສຸດທິ; ແນວໃດກໍ່ຕາມ, ທ່າແຮງຂອງຂະແໜງການຍັງບໍ່ນຳໃຊ້ຢ່າງເຕັມສ່ວນ. ໃນສອງທົດສະວັດທີ່ຜ່ານມາ, ການຄ້າຂ້າມຊາຍແດນແລະການຖ່າຍທອດເຕັກໂນໂລຊີແມ່ນໄດ້ມີຄວາມສຳຄັນຫຼາຍຂຶ້ນ. ການເຊື່ອມຕໍ່ທີ່ເພີ່ມຂຶ້ນຍັງເຮັດໃຫ້ມີການໄດ້ຮັບຜົນພອຍໄດ້ທາງດ້ານນະໂຍບາຍທີ່ໃຫຍ່ກວ່າເກົ່າໃນຂອບເຂດອະນຸພາກພື້ນແມ່ນ້ຳຂອງ[32] (GMS). ຕົວຢ່າງເຊັ່ນ, ໂຄງການຮັບຈຳນຳເຂົ້າຂອງໄທ ໄດ້ມີຜົນກະທົບຕໍ່ຂະບວນການ ແລະ ກະແສການໄຫລວຽນຂອງການຄ້າໃນກຸ່ມເສດຖະກິດ GMS ຕະຫຼອດປີ 2011-2014; ເຖິງຢ່າງໃດກໍ່ຕາມ, ການໄດ້ຮັບຜົນພອຍໄດ້ດັ່ງກ່າວບໍ່ໄດ້ຖືກນຳມາແກ້ໄຂຢູ່ໃນຍຸດທະສາດ ແລະ ແຜນແຫ່ງຊາດຂອງ ສປປ ລາວ.

233. **ການຜະລິດເຂົ້າຂອງ ສປປ ລາວ ມີ 3 ປະເພດໃຫຍ່ຄື: ຜະລິດໃນລະດູຝົນ, ໃນລະດູແລ້ງ ແລະ ຢູ່ເຂດເນີນສູງ.** ທົ່ງນາເຂົ້າໃນລະດູຝົນ ແລະ ລະດູແລ້ງ, ແບບທີ່ໃຊ້ຊົນລະປະທານ, ສ່ວນຫຼາຍແມ່ນຕັ້ງຢູ່ພາກກາງ ແລະ ພາກໃຕ້, ລຽບຕາມອ່າງແມ່ນ້ຳຂອງ, ເຊິ່ງເປັນບ່ອນທີ່ມີທົ່ງພຽງສ່ວນໃຫຍ່ ຂອງປະເທດ. ການຜະລິດເຂົ້າເຂດເນີນສູງສ່ວນຫຼາຍແມ່ນປູກໃນລະດູຝົນ, ແມ່ນຢູ່ເຂດພູດອຍຂຶ້ນໄປທາງພາກເໜືອ ແລະ ສ່ວນຫຼາຍແມ່ນຊົນເຜົ່າສ່ວນໜ້ອຍເປັນຜູ້ປູກເພື່ອລ້ຽງຊີບ, ເຊິ່ງເຂົາເຈົ້າໄດ້ດຳລົງຊີວິດຢູ່ເຂດພູດອຍແບບເປັນມູນເຊື້ອ. ເຂົ້ານາປີ ແມ່ນກວມສ່ວນໃຫຍ່ຂອງຜົນຜະລິດ, ສະເລ່ຍຢູ່ທີ່ 81,3 ສ່ວນຮ້ອຍໃນຊ່ວງໄລຍະ ຫ້າປີ ແຕ່ 2014-18, ຮອງລົງມາແມ່ນຜົນການຜະລິດລະດູແລ້ງ (12,2 ສ່ວນຮ້ອຍ) ແລະ ເຂົ້າໄຮ່ (6,5 ສ່ວນຮ້ອຍ).

234. **ການຜະລິດເຂົ້າສ່ວນໃຫຍ່ໃນ ສປປ ລາວ ດຳເນີນໄປໃນລະດູຝົນ.** ໃນນັ້ນລວມມີເຂົ້ານາປີ ແລະ ເຂົ້າໄຮ່, ກວມເອົາປະມານ 88% ຂອງຜົນຜະລິດເຂົ້າທັງໝົດໃນທົ່ວປະເທດປະຈຳປີໃນໄລຍະ 5 ປີຂອງປີ 2014-18 ແລະ ສ່ວນຫລວງຫລາຍກໍ່ເປັນການເຮັດການຜະລິດຂະໜາດນ້ອຍ ແລະ ເພື່ອການຊົມໃຊ້ເອງ. ປະມານ 95 ສ່ວນຮ້ອຍຂອງຜົນຜະລິດເຂົ້າແມ່ນເພື່ອບໍລິໂພກພາຍໃນປະເທດ; ສ່ວນເຫລືອກໍ່ແມ່ນເພື່ອສົ່ງອອກ. ສປປ ລາວ ມີເອກະລັກທາງດ້ານການປູກເຂົ້າໜຽວ, ເຊິ່ງເປັນຄວາມມັກໃນແຕ່ວັນຂອງຄົນລາວ; ມັນປະກອບດ້ວຍ 90 ສ່ວນຮ້ອຍຂອງຜົນຜະລິດທັງຫມົດ.

235. **ເຂົ້າທີ່ຜະລິດຢູ່ໃນປະເທດແມ່ນມີການສີເຂົ້າໃນໂຮງສີຂອງທ້ອງຖິ່ນ ທີ່ເປັນໂຮງສີຂະໜາດນ້ອຍ.** ເຂົ້າທີ່ສີມາແລ້ວແມ່ນເກັບໄວ້ໃນກະເປົ໋າເປີດ ຫຼືຖົງເປີດຢູ່ຮ້ານຂາຍເຂົ້າຂະໜາດນ້ອຍທີ່ມັກຢູ່ຂ້າງຫຼືໃກ້ກັບຕະຫຼາດອາຫານສົດ (ອາຫານດິບ) ແລະຂາຍໃນປະລິມານຫນ້ອຍ. ລະບົບຕ່ອງໂສ້ມູນຄ່າເຂົ້າຂອງ ສປປ ລາວ ມີປະສິດທິພາບໜ້ອຍກວ່າທຽບກັບເສດຖະກິດເພື່ອນບ້ານຂອງໄທ ແລະ ຫວຽດນາມ. ຂົງເຂດທີ່ມີທ່າແຮງທີ່ຈະສາມາດເພີ່ມປະສິດທິພາບໄດ້ລວມມີລະບົບການສະໜອງປັດໄຈຮັບໃຊ້, ຜະລິດຕະພາບໃນລະດັບຟາມປູກຝັງແລະລ້ຽງສັດ, ການສີ, ໂລຊິດສະຕິກ ແລະ ການຂົນສົ່ງ ແລະ ການຜະລິດເຂົ້າທີ່ມີຄຸນນະພາບສູງກວ່າ. ການເພີ່ມຜະລິດຕະພາບແຮງງານມີຜົນເຮັດໃຫ້ມີການເພີ່ມລາຍຮັບກະສິກຳ ແລະ ກະຕຸ້ນການຫັນປ່ຽນໂຄງປະກອບໂດຍກົງ.

236. **ປັດຈຸບັນ ສປປ ລາວ ເປັນປະເທດທີ່ສົ່ງອອກເຂົ້າລາຍນ້ອຍ ແລະ ບໍ່ເປັນປົກກະຕິ ໄປຍັງຫວຽດນາມ, ຈີນ ແລະ ສະຫະພາບເອີຣົບ.** ບັນດາເສດຖະກິດທີ່ມີຕະຫຼາດສົ່ງອອກເປັນປົກກະຕິສຳລັບຜະລິດຕະພັນເຂົ້າຂອງຕົນ ຈະມີຂະແໜງການພາຍໃນປະເທດທີ່ມີປະສິດທິພາບກວ່າ ເຊິ່ງເປັນທີ່ຮູ້ຈັກທົ່ວໄປຈາກຄຸນນະພາບ, ການສະໜອງທີ່ໜ້າເຊື່ອຖື, ການຕະຫຼາດທີ່ມີປະສິດທິຜົນ ແລະ ການສ້າງຍີ່ຫໍ້.

**ຜົນການຈັດຕັ້ງປະຕິບັດດ້ານສະມັດຖະພາບ ແລະ ທ່າອ່ຽງ**

237. **ຜົນຜະລິດເຂົ້າທັງໝົດປະຈຳປີ ຂອງ ສປປ ລາວ ໄດ້ເພີ່ມຂຶ້ນໃນໄລຍະ 10 ປີຂອງປີ 2009-18.** ນັບຕັ້ງແຕ່ປີ 2014, ແມ່ນໄດ້ເພີ່ມຂຶ້ນຢ່າງຕໍ່ເນື່ອງຈາກ 3 ລ້ານປາຍໂຕນກວ່າໆ ເປັນ 4 ລ້ານກວ່າໂຕນ, ໂດຍມີການເໜັງຕີງປະຈຳປີຍ້ອນສະພາບອາກາດແລະສັດຕູພືດ (ຮູບ 1). ຢ່າງໃດກໍ່ຕາມ, ໃນປີ 2018, ຂໍ້ມູນຫລ້າສຸດ, ຜົນຜະລິດລວມຫຼຸດລົງຕໍ່າກວ່າຄ່າສະເລ່ຍໃນ 5 ປີຂອງຕົນມາເປັນ 3,46 ລ້ານໂຕນ, ຈາກ 4,06 ລ້ານໂຕນໃນປີ 2017, ຕົ້ນຕໍແມ່ນຍ້ອນໄພນ້ຳຖ້ວມ. ໃນປີ 2018, ປະມານ 12 ສ່ວນຮ້ອຍຂອງເຂົ້າທີ່ໄດ້ປູກແມ່ນໄດ້ຖືກທຳລາຍ, ສ່ວນໃຫຍ່ແມ່ນຍ້ອນໄພນ້ຳຖ້ວມໜັກ, ອີງຕາມຂໍ້ມູນຂອງສູນສະຖິຕິແຫ່ງຊາດ ຂອງລາວ. ໃນປີ 2019, ອົງການ FAO ໄດ້ຄາດຄະເນວ່າຜົນຜະລິດແມ່ນປະມານ 3,4 ລ້ານໂຕນ; ອີກເທື່ອໜຶ່ງ, ຕ່ຳກວ່າລະດັບສະເລ່ຍໃນຮອບ 5 ປີ, ເປັນຕົ້ນແມ່ນຍ້ອນສະພາບອາກາດທີ່ບໍ່ດີ ເຊິ່ງປະກອບດ້ວຍໄພແຫ້ງແລ້ງໃນພາກເໜືອ ແລະ ໄພນ້ຳຖ້ວມໃນພາກກາງ ແລະ ພາກໃຕ້.[33]

238. **ການຜະລິດ ມີການຍ້າຍທີ່ໄປທາງທິດໃຕ້ ໂດຍມີການເຮັດການຜະລິດນາປີເພີ່ມຂຶ້ນ.** ໃນທົດສະວັດທີ່ຜ່ານມາ (2009 - 2018), ການຜະລິດເຂົ້າໄດ້ຫັນໄປສູ່ພາກກາງ ແລະ ພາກໃຕ້, ຫ່າງໄກຈາກພາກ ເໜືອ ແລະ ຫັນໄປສູ່ການ

---

31. ທະນາຄານພັດທະນາອາຊີ (ທັນວາ 2018).
32. ກຳປູເຈຍ, ສປປ ລາວ, ມຽນມາ, ໄທ, ແລະ ຫວຽດນາມ.
33. FAO (ເມສາ 2020): ຂໍສະຫລຸບສຳລັບປະເທດ 22 ເມສາ 2020.

ຜະລິດເຂົ້ານາປີຫຼາຍຂຶ້ນ. ໃນໄລຍະ 5 ປີ ຂອງປີ 2014 - 18, ທັງພາກກາງ ແລະ ພາກໃຕ້ໄດ້ເພີ່ມສ່ວນແບ່ງຂອງຕົນຂຶ້ນເປັນ 83 ສ່ວນຮ້ອຍຂອງຜົນຜະລິດທັງໝົດ.[34] ການຜະລິດເຂົ້າທີ່ຫັນໄປທາງໃຕ້ນີ້ແມ່ນເປັນຜົນມາຈາກທ່ຳມະຊາດ ຂອງການຜະລິດກະສິກຳເປັນສິນຄ້າໃນປະເທດທີ່ເພີ່ມຂຶ້ນ ຍ້ອນວ່າຊາວກະສິກອນຫັນໄປສູ່ການປູກພືດທີ່ໃຫ້ຜົນຜະລິດຫຼາຍຂຶ້ນ. ໂດຍການເຂົ້າມາຂອງນັກລົງທຶນຈີນ, ໄດ້ມີການລົງທຶນໃໝ່ເພີ່ມເຕີມ ຢູ່ພາກເໜືອ ທີ່ສ່ວນໃຫຍ່ເປັນເຂດພູດອຍ, ໃນການປູກພືດອື່ນໆເພື່ອເປັນສິນຄ້າ ເຊັ່ນ ກ້ວຍ ແລະ ພືດຜັກ. ໃນເຂດພາກກາງ ແລະ ພາກໃຕ້ ຊຶ່ງການຜະລິດເຂົ້າແມ່ນໃຫ້ຜົນຜະລິດດີກວ່າ, ການປູກເຂົ້າໄດ້ຂະຫຍາຍກວ້າງອອກ ໂດຍການເພີ່ມເນື້ອທີ່ເກັບກ່ຽວຂຶ້ນເປັນ 12 ແລະ 14,6 ສ່ວນຮ້ອຍ ຕາມລຳດັບ.

## ຮູບທີ 6.2 ການຜະລິດເຂົ້າທັງໝົດໃນ ສປປ ລາວ: 2009-18




*ໝາຍເຫດ: ໃນຕົວເລກ ຂອງຮູບຂ້າງເທິງ, ຈໍ້າເມັດ ໝາຍເຖິງໝາຍຈຸດ(ຂອງເສດສ່ວນ)*

239. **ສີ່ແຂວງທີ່ມີການຜະລິດໃຫຍ່ທີ່ສຸດຄື: ສະຫວັນນະເຂດ, ຈຳປາສັກ, ສາລະວັນ, ແລະ ຄຳມ່ວນ ໄດ້ເພີ່ມສ່ວນແບ່ງຂອງຕົນໃນການຜະລິດທັງໝົດ, ຕົ້ນຕໍແມ່ນມາຈາກການເພີ່ມເນື້ອທີ່ປູກຝັງ.** ສີ່ແຂວງດັ່ງກ່າວເປັນແຂວງຕິດຕໍ່ກັນ ແລະ ຕັ້ງຢູ່ຕາມອ່າງແມ່ນ້ຳຂອງ ເຊິ່ງເປັນເຂດຜະລິດເຂົ້າຂອງພາກ. ແຂວງສະຫວັນນະເຂດ ຍັງຄົງເປັນຜູ້ຜະລິດລາຍໃຫຍ່ ໂດຍເຫັນໄດ້ຄວາມສຳຄັນທີ່ເພີ່ມຂຶ້ນ ຍ້ອນສ່ວນແບ່ງຂອງແຂວງໃນຜົນຜະລິດປະຈຳປີແຫ່ງຊາດໄດ້ເພີ່ມຂຶ້ນຈາກ 21,8% ໃນໄລຍະ 5 ປີ 2009-13 ເປັນ 24,5% ໃນລະຫວ່າງປີ 2014-18, ໃນຂະນະທີ່ ນະຄອນຫຼວງວຽງຈັນ, ແຂວງວຽງຈັນ ແລະ ໄຊຍະບູລີ ລ້ວນແຕ່ມີສ່ວນແບ່ງທີ່ຫຼຸດລົງໃນຜົນຜະລິດແຫ່ງຊາດ.

240. **ການຂະຫຍາຍຕົວຂອງຜົນຜະລິດຕົ້ນຕໍແມ່ນຍ້ອນການຂະຫຍາຍເນື້ອທີ່ດິນ ເຊິ່ງການເຕີບໂຕຂອງຜະລິດຕະພາບເຫັນວ່າຍັງຈຳກັດ.** ການຂະຫຍາຍຕົວຂອງຜົນຜະລິດໃນໄລຍະ 2009-18 ແມ່ນຜົນລວມຂອງການຂະຫຍາຍເນື້ອທີ່ດິນເພື່ອປູກພືດລະດູຝົນ ແລະ ການເພີ່ມຜະລິດຕະພາບ. ການນຳໃຊ້ທີ່ດິນທັງໝົດໃນການຜະລິດເຂົ້າທັງສາມປະເພດລວມກັນ (ນາປີ, ນາແຊງ, ເຂົ້າໄຮ່) ໃນໄລຍະ 10 ປີນີ້ ໄດ້ເພີ່ມຂຶ້ນຈາກ 874.043 ເຮັກຕາສະເລ່ຍໃນໄລຍະປີ 2009-13 ເປັນ 965.017 ເຮັກຕາໃນໄລຍະຫ້າປີຕໍ່ມາ, ເທົ່າກັບການເພີ່ມຂຶ້ນ 10,4 ສ່ວນຮ້ອຍ. ໃນລະຫວ່າງປີ 2009-13, ຜະລິດຕະພາບໄດ້ເພີ່ມຂຶ້ນ 13 ສ່ວນຮ້ອຍ, ຈາກລະດັບທີ່ຕ່ຳໃນ 5 ປີຄືສະເລ່ຍ 3,7 ໂຕນ/ເຮັກຕາ ເປັນ 4,2 ໂຕນ/ເຮັກຕາ ໃນ 5 ປີ[35] ຕໍ່ມາ.

241. **ຜະລິດຕະພາບການຜະລິດເຂົ້າຂອງລາວທີ່ຂ້ອນຂ້າງຕ່ຳແມ່ນຍ້ອນລັກສະນະການຜະລິດແບບກຸ້ມຕົນເອງພໍໃຊ້ພໍລາວ.** ເຂົ້າໄຮ່ເພື່ອການລ້ຽງຊີບ, ເຊິ່ງກວມເອົາໜ້ອຍກວ່າ 7 ສ່ວນຮ້ອຍຂອງຜົນຜະລິດເຂົ້າທັງໝົດຂອງປະເທດ, ຜະລິດໄດ້ພຽງ 2 ໂຕນຕໍ່ເຮັກຕາຕໍ່ລະດູການ. ເຂົ້ານາລະດູຝົນກວມເອົາຫຼາຍກວ່າ 81 ສ່ວນຮ້ອຍຂອງຜົນຜະລິດເຂົ້າທັງໝົດສະເລ່ຍໃນໄລຍະ 2014 - 18 ແລະ ສ່ວນຫຼາຍຍັງແມ່ນເພື່ອການດຳລົງຊີບ, ໃຫ້ຜົນຜະລິດ 4,3 ໂຕນ/ເຮັກຕາ ໃນໄລຍະ 5 ປີ 2014 - 18, ເປັນການເພີ່ມຂຶ້ນ ຈາກ 3,9 ໂຕນ/ເຮັກຕາ ໂດຍສະເລ່ຍໃນລະຫວ່າງປີ 2009 - 13 (ຮູບ 6.3). ການປູກເຂົ້ານາແຊງ ທີ່ເປັນການຜະລິດເປັນສິນຄ້າຫຼາຍກວ່າ ແມ່ນມີສະມັດຖະພາບຂ້ອນຂ້າງສູງ, ໂດຍສະເລ່ຍ 5,1 ໂຕນ/ເຮັກຕາ ຕໍ່ລະດູການເກັບກ່ຽວ ໃນໄລຍະ 2014 - 18, ໂດຍເພີ່ມຂຶ້ນຈາກ 4,7 ໂຕນ/ເຮັກຕາ ໃນຊ່ວງ 5 ປີຜ່ານມາ.

34. ແທນທີ່ຈະກວດເບິ່ງປີຕໍ່ປີ, ການເອົາຄ່າສະເລ່ຍໃນໄລຍະຫ້າຫຼືສາມປີແມ່ນໃຫ້ເຫັນພາບທີ່ຖືກຕ້ອງກວ່າກ່ຽວກັບການປ່ຽນແປງຕາມການເວລາ, ເນື່ອງຈາກວ່າຜົນຜະລິດກະສິກຳແມ່ນຂຶ້ນກັບການເໜັງຕີງຂອງສະພາບອາກາດຕາມລະດູການ, ສັດຕູພືດ ແລະ ການຕິດເຊື້ອຈາກພະຍາດ.
35. ການຂະຫຍາຍເນື້ອທີ່ດິນ ແລະ ການເພີ່ມຜະລິດຕະພາບແມ່ນໄດ້ວັດແທກໂດຍອີງຕາມຄ່າສະເລ່ຍ 5 ປີຂອງ ໄລຍະ 5 ປີ ສອງຄັ້ງ ຄື 2009-13 ແລະ 2014-18, ສຳລັບມາດຕະການແຕ່ລະອັນ.

## ຮູບທີ 6.3 ການປຽບທຽບຜະລິດຕະພາບຕາມແຕ່ລະປະເພດຂອງການຜະລິດເຂົ້າ ຢູ່ສປປລາວ: 2009-18




Data source: https://laosis.lsb.gov.la/ (accessed 1 September 2020).

*ໝາຍເຫດ: ລາຍການໃນແກນນອນຈາກຊ້າຍໄປຂວາແມ່ນຜົນຜະລິດເຂົ້ານາປີ, ນາແຊງ ແລະ ເຂົ້າໄຮ່ເນີນສູງ (2013-17). ໃນຕົວເລກ, ໝາຍຈໍ້າ ແມ່ນ ຈຸດຂອງເສດສ່ວນ.*

242. **ສ່ວນແບ່ງຂອງເຂົ້ານາລະດູແລ້ງໃນຜົນຜະລິດທັງໝົດຂອງປະເທດ ແລະ ໃນເນື້ອທີ່ເກັບກ່ຽວໄດ້ຫຼຸດລົງທັງສອງຢ່າງ.** ໃນຂະນະທີ່ໄດ້ມີຄວາມກ້າວໜ້າໃນດ້ານຜະລິດຕະພາບ, ສັນຍານທີ່ໜ້າເປັນຫ່ວງກໍໄດ້ປາກົດຂຶ້ນ, ລວມທັງຜົນຜະລິດສະເລ່ຍປະຈຳປີຄືກັນທີ່ເປັນເວລາໜຶ່ງທົດສະວັດ (2009-18). ນີ້ແມ່ນ ໝາກຜົນຕົ້ນຕໍທີ່ລັດຖະບານໄດ້ສະໜັບສະໜູນລະບົບຊົນລະປະທານ ເຊິ່ງຊາວກະສິກອນຫຼາຍຄົນກໍໄດ້ ຫລີກລ່ຽງຍ້ອນໄດ້ເສຍຄ່າໃຊ້ຈ່າຍທີ່ໜັກໜ່ວງ.

243. **ຕົວແທນຈຳໜ່າຍຂະໜາດນ້ອຍ ມີຈຳນວນຫລາຍກວ່າຢູ່ຕະຫຼາດພາຍໃນ.** ການຜະລິດເຂົ້າເກືອບທັງໝົດແມ່ນຜູ້ຜະລິດລາຍນ້ອຍເພື່ອການລ້ຽງຊີບແບບກຸ່ມຕົນເອງພໍໃຊ້ພໍລາວເປັນຜູ້ຄອບຄອງເປັນສ່ວນໃຫຍ່, ໂດຍຊາວກະສິກອນຈະດຳເນີນການຕາກເຂົ້າໃຫ້ແຫ້ງ ແລະ ເກັບມ້ຽນເຂົ້ານາຂອງເຂົາເຈົ້າເອງ ແລ້ວສົ່ງໄປໃຫ້ໂຮງສີນ້ອຍໃນທ້ອງຖິ່ນ ເມື່ອຕ້ອງການບໍລິໂພກໃນຄົວເຮືອນ. ມີພຽງແຕ່ສ່ວນເກີນທີ່ໄດ້ຂາຍໂດຍກົງໃຫ້ໂຮງສີໃນທ້ອງຖິ່ນ ຫຼືຜູ້ຮອບຮວມເຂົ້າແບບພໍ່ຄ້າເຄື່ອນທີ່ ເຊິ່ງຂາຍຕໍ່ໃຫ້ກັບໂຮງສີຂະໜາດໃຫຍ່ຈຳນວນໜຶ່ງທີ່ເປັນຜູ້ເກັບຊື້ເຂົ້າແລະຂາຍເພື່ອເປັນສິນຄ້າ. ການຜະລິດເຂົ້າເພື່ອແນໃສ່ເປັນສິນຄ້າແທ້ໆ ຈະແມ່ນໂຮງສີໃຫຍ່ກວ່າເປັນເຈົ້າຂອງ ແລະ ເປັນຜູ້ດຳເນີນງານ ຫຼືຊາວກະສິກອນລາຍນ້ອຍທີ່ເຂົ້າຮ່ວມສັນຍາຜູກພັນສອງສົ້ນກັບບັນດາໂຮງສີ.

244. **ການກຳນົດລາຄາເຂົ້າດ້ວຍລາຄາແຊກແຊງຂອງລັດ ແລະ ດ້ວຍນິຕິກຳຄວນມີການຢຸດຕິ.** ລັດຖະບານເຂົ້າກ່ຽວຂ້ອງໃນວຽກງານລາຄາເພື່ອສົ່ງເສີມສະຖຽນລະພາບລາຄາສຳລັບເຂົ້າ (ແລະ ຜະລິດຕະພັນສິນຄ້າທີ່ຈຳເປັນອື່ນໆ). MOIC ເກັບກຳຂໍ້ມູນກ່ຽວກັບມູນຄ່າເພີ່ມໃນແຕ່ລະຂອດຂອງລະບົບຕ່ອງໂສ້ມູນຄ່າໂດຍມີຈຸດປະສົງເພື່ອສະເໜີແນະລາຄາເກັບຊື້ຂັ້ນຕໍ່າໃນແຕ່ລະຂັ້ນຕອນ. ຄວນຊຸກຍູ້ການເກັບກຳຂໍ້ມູນ ເພາະວ່າການເຜີຍແຜ່ຂໍ້ມູນນີ້ຈະຊ່ວຍເຮັດໃຫ້ສາມາດຮູ້ໄດ້ກ່ຽວກັບລາຄາ; ແນວໃດກໍ່ຕາມ, ການກຳນົດລາ ຄາດ້ວຍນິຕິກຳຄວນຈະຖືກຢຸດຕິ. ການກຳນົດລາຄາຄືກັນທີ່ສຳລັບຜະລິດຕະພັນສິນຄ້າເປັນການຈຳແນກລະ ຫວ່າງຜູ້ຜະລິດ. ຕົ້ນທຶນການຜະລິດມີຄວາມແຕກຕ່າງກັນຢ່າງຫຼວງຫຼາຍພາຍໃນກິດຈະກຳສະເພາະໃນຟາມກະສິກຳ ແລະ ວິສາຫະກິດ. ການກຳນົດລາຄາຕ່ຳສຸດອາດຈະບໍ່ຊຸກຍູ້ຊາວກະສິກອນທີ່ຜະລິດໄດ້ຫຼາຍກວ່າທີ່ຈະສະເໜີລາຄາຕໍ່າລົງ ເພື່ອໃຊ້ປະໂຫຍດຈາກການປະຢັດຈາກສະມັດຖະພາບການຜະລິດທີ່ມີຂະ ໜາດໃຫຍ່ຂຶ້ນ (scale economies); ມັນຈະເຮັດໃຫ້ຜູ້ລົງທຶນເກີດຄວາມທໍ້ຖອຍແລະຈຳກັດການເຕີບໂຕຂອງຜະລິດຕະພາບ. ນອກຈາກນັ້ນ, ການກຳນົດລາຄາເປັນລາຍສິນຄ້າບໍ່ໄດ້ແກ້ໄຂຄວາມແຕກຕ່າງທາງດ້ານຄຸນນະພາບ ແລະ ຈະບໍ່ຊຸກຍູ້ການລົງທຶນທີ່ແນໃສ່ສ້າງການປັບປຸງຄຸນນະພາບທີ່ມີມູນຄ່າເພີ່ມໃຫ້ດີຂຶ້ນ.

### ບັນດາສິ່ງທ້າທາຍ

245. **ຄຸນລັກສະນະຂອງຕ່ອງໂສ້ມູນຄ່າເຂົ້າ.** (i) ຜະລິດຕະພາບ ແລະ ການຄຸ້ມຄອງຄຸນນະພາບຕໍ່າໃນຟາມ ແລະ ໃນລະດັບຖັດໄປຫຼັງຈາກຟາມ, (ii) ຂະແໜງໂຮງສີທີ່ກະແຈກກະຈາຍ ເຊິ່ງສ່ວນຫລາຍແມ່ນຜູ້ປະກອບການຂະໜາດນ້ອຍທີ່ໃຊ້ເຕັກໂນໂລຊີເກົ່າເປັນຜູ້ຄອບຄອງຢູ່, (iii) ນະໂຍບາຍສົ່ງເສີມທີ່ມີນ້ອຍໃນການເພີ່ມຄຸນນະພາບຜະລິດຕະພັນສິນຄ້າ; ແລະ (iv) ກຳລັງຊື້ພາຍໃນມີຂອບເຂດແຄບ. ຂໍ້ຈຳກັດໃນຂະ ແໜງການເຂົ້າຂອງ ສປປ ລາວ ລວມມີ ຂີດຄວາມສາມາດທີ່ມີຂອບເຂດ, ຜະລິດຕະພາບຕ່ຳ, ຕົ້ນທຶນການຜະລິດສູງ, ການຂາດປະສິດທິພາບໃນແຕ່ລະຂອດຂອງລະບົບຕ່ອງໂສ້ມູນຄ່າ ແລະ ການສະໜອງ ແລະ ຄຸນນະພາບທີ່ບໍ່ແນ່ນອນຢ່າງສະເໝີຕົ້ນສະເໝີປາຍ. ການເພີ່ມທະວີຄວາມຍືນຍົງຂອງ

ຂະແໜງການເຂົ້າໂດຍວິທີຫຼຸດຜ່ອນການປ່ອຍອາຍພິດ ຕ້ອງມີການລົງທຶນໃນການປັບປຸງຊົນລະປະທານ, ການບໍລິຫານຈັດ ການເສດຕົກຄ້າງທີ່ມາກັບນໍ້າລົ້ນອອກຈາກຄອງ, ການຂະຫຍາຍການບໍລິການສົ່ງເສີມກະສິກໍາທີ່ນໍາໃຊ້ເຕັກໂນໂລຊີອັດສະລິຍະທາງດ້ານດິນຟ້າອາກາດ ແລະ ການກະຈາຍການຜະລິດພືດ.

246. **ການຂາດປະສິດທິພາບຢູ່ໃນລະດັບຟາມກະສິກໍາ.** ການສຶກສາລະບົບຕ່ອງໂສ້ມູນຄ່າຂອງທະນາ ຄານໂລກ (ມິຖຸນາ 2018) ເປີດເຜີຍວ່າ: ປັດໄຈຫຼັກທີ່ກີດຂວາງຊາວກະສິກອນຈາກການເຮັດກະເສດສຸມ ເພື່ອເພີ່ມສະມັດຖະພາບ ແລະ ຜົນຜະລິດ, ໂດຍການປູກຝັງທັງໃນລະດູຝົນ ແລະ ລະດູແລ້ງ ແມ່ນບັນຫາຜົນກໍາໄລຕໍ່າ ເຊິ່ງເປັນຜົນມາຈາກການລວມກັນຂອງ ຜະລິດຕະພາບທີ່ຕໍ່າ, ຄຸນນະພາບຂອງເຂົ້າເປືອກທີ່ຕໍ່າ ແລະຕົ້ນທຶນການຜະລິດ[36] ທີ່ສູງ. ການສຶກສານີ້ພົບເຫັນຫຼັກຖານທີ່ສໍາຄັນທີ່ກົງກັນຂ້າມກັບຄວາມເຊື່ອທົ່ວໄປທີ່ວ່າຊາວກະສິກອນໄດ້ຂາຍຜົນຜະລິດໃນລາຄາ ຢູ່ໜ້າຟາມທີ່ຕໍ່າ. ໃນຄວາມເປັນຈິງ, ຊາວກະສິ ກອນລາວໄດ້ຮັບລາຄາຂາຍຢູ່ໜ້າຟາມສູງກວ່າ (ຄື 290 ໂດລາ) ຕໍ່ໂຕນເຂົ້າເປືອກ ທຽບໃສ່ຊາວກະສິ ກອນໃນຫວຽດນາມ (227 ໂດລາ) ແລະອິນເດຍ (254 ໂດລາ), ແຕ່ຕໍ່າກວ່າຊາວກະສິກອນໃນໄທ (332 ໂດລາ) ແລະຈີນ (476 ໂດລາ).[37] ແນວໃດກໍ່ຕາມ, ຊາວກະສິກອນໃນ ສປປ ລາວ ໄດ້ຮັບກໍາໄລສຸດທິຕໍ່າສຸດຕໍ່ໂຕນ, ມີພຽງແຕ່ 12 ສ່ວນຮ້ອຍ, ທຽບໃສ່ຫວຽດນາມ 48 ສ່ວນຮ້ອຍ, ອິນເດຍ 21 ສ່ວນຮ້ອຍ, ໄທ 59 ສ່ວນຮ້ອຍ ແລະ ຈີນ 44 ສ່ວນຮ້ອຍ.

247. **ການປະກອບສ່ວນອັນໃຫຍ່ຫຼວງ ທີ່ເຮັດໃຫ້ຕົ້ນທຶນການຜະລິດສູງ ແມ່ນຕົ້ນທຶນທີ່ສູງ ຂອງວັດຖຸປະກອນຮັບໃຊ້ການປູກຝັງ ແລະ ລ້ຽງສັດໃນໄລຍະຕົ້ນ ແລະ ປາຍ, ການບຸກເບີກພື້ນທີ່ ແລະ ການເກັບກ່ຽວ, ຕົ້ນຕໍແມ່ນມາຈາກການດໍາເນີນງານຂະໜາດນ້ອຍ.** ແມ່ນແຕ່ຟາມຂະໜາດນ້ອຍ, ໂດຍສະເພາະຜູ້ທີ່ມີເດັກນ້ອຍເຂົ້າໂຮງຮຽນຫຼືເດັກນ້ອຍທີ່ໃຫຍ່ແລ້ວທີ່ເຮັດວຽກຢູ່ໃນຕົວເມືອງ, ໂດຍທົ່ວໄປແລ້ວຈະຕ້ອງການການຊ່ວຍເຫຼືອຂອງແຮງງານຮັບຈ້າງ ແລະ ເຊົ່າເຄື່ອງກົນຈັກສໍາລັບການກະກຽມດິນ ແລະການເກັບກ່ຽວ. ປັດໄຈຕົ້ນຕໍທີ່ເຮັດໃຫ້ຕົ້ນທຶນທີ່ເພີ່ມຂຶ້ນ ແມ່ນການດໍາເນີນງານຂະໜາດນ້ອຍ ແລະ ການປູກພືດລະດູດຽວ. ເຈົ້າຂອງ/ຜູ້ຄວບຄຸມເຄື່ອງຈັກໃນການກະກຽມດິນ ແລະ ການເກັບກ່ຽວຕ້ອງຄິດໄລ່ຄ່າເຄື່ອນຍ້າຍເຄື່ອງຈັກຈາກຟາມໜຶ່ງໄປຍັງອີກຟາມໜຶ່ງ ເຊິ່ງໄດ້ໃຊ້ວຽກຫລາຍແຕ່ໃນພຽງລະດູດຽວ; ເຂົ້າລະດູແລ້ງກວມເອົາພຽງແຕ່ 12 ສ່ວນຮ້ອຍ ຂອງການຜະລິດເຂົ້າທັງໝົດປະຈໍາປີ (2014-18). ເຄື່ອງຈັກທີ່ບໍ່ໄດ້ໃຊ້ວຽກແມ່ນມີຄ່າໃຊ້ຈ່າຍ, ເຊິ່ງເຈົ້າຂອງຈະຕ້ອງໄດ້ລວມເຂົ້າຢູ່ໃນຄ່າບໍລິການໃນເວລາທີ່ຈ້າງ. ຊາວກະສິກອນຂະໜາດນ້ອຍທີ່ສາມາດເປັນເຈົ້າຂອງລົດໄຖນາຂະໜາດນ້ອຍ, ໂດຍທົ່ວໄປແລ້ວແມ່ນປະເພດທີ່ຜູ້ຄວບຄຸມຕ້ອງໄດ້ຍ່າງຕາມໄປ, ຈະໃຊ້ມັນ ພຽງແຕ່ໜຶ່ງລະດູການຕໍ່ປີ.

248. **ຕົ້ນທຶນການດໍາເນີນງານສູງຂອງຊົນລະປະທານ, ສ່ວນໃຫຍ່ແມ່ນຍ້ອນການຄຸ້ມຄອງການດໍາເນີນງານທີ່ບໍ່ມີປະສິດທິພາບ ແລະ ການດໍາເນີນການຂະໜາດນ້ອຍ.** ນີ້ແມ່ນໜຶ່ງໃນບັນດາສິ່ງກີດກັ້ນທີ່ສໍາຄັນໃນການເພີ່ມການຜະລິດເຂົ້າໃນລະດູແລ້ງ. ປັດຈຸບັນລະບົບຊົນລະປະທານສ່ວນໃຫຍ່ເປັນຂອງສາທາລະນະ, ເນື່ອງຈາກການຂາດການລົງທຶນຂອງເອກະຊົນ, ໃນຂະນະທີ່ການດໍາເນີນງານ ຂອງສິ່ງເຫລົ່ານີ້ອາດຈະຢູ່ພາຍໃຕ້ກຸ່ມຜູ້ໃຊ້ນໍ້າ ຫຼືຊາວກະສິກອນເອກະຊົນທີ່ນໍາໜ້າ ທີ່ມີເນື້ອທີ່ດິນກະສິກໍາ ແລະ ການລົງທຶນຂ້ອນຂ້າງໃຫຍ່. ເນື່ອງຈາກການຈັດການດັ່ງກ່າວ, ລະບົບຊົນລະປະທານສ່ວນໃຫຍ່ຖືກຄຸ້ມຄອງໂດຍເຈົ້າໜ້າທີ່ທີ່ມີຄວາມຮູ້ໜ້ອຍ, ມີຄວາມສາມາດໜ້ອຍ ແລະມີຄວາມສົນໃຈໜ້ອຍໃນການຮັກສາການບໍລິການທີ່ດີແລະການປະຕິບັດງານທີ່ມີປະສິດທິພາບ, ເຊິ່ງເຮັດໃຫ້ການບໍລິການບໍ່ເປັນໜ້າເຊື່ອຖືປານໃດ ແລະ ມີຄ່າໃຊ້ຈ່າຍສູງກວ່າທຽບໃສ່ຖ້າວ່າເຈົ້າຂອງເປັນເອກະຊົນ.

249. **ຄວາມບໍ່ມີປະສິດທິພາບ ໃນແຕ່ລະຂອດຂອງລະບົບຕ່ອງໂສ້ມູນຄ່າຈາກຂອດການເກັບຮວບຮວມສິນຄ້າ, ການສີ, ຈົນເຖິງການຈໍລະຈອນແຈກຢາຍໃຫ້ຜູ້ຊົມໃຊ້ສຸດທ້າຍ.** ບັນດາຟາມປູກເຂົ້າຂະໜາດນ້ອຍທີ່ບໍ່ມີບ່ອນລວມເພື່ອເກັບຮັກສາຜົນເກັບກ່ຽວ, ຈະຂາຍໃຫ້ຜູ້ເກັບຮວບຮວມສິນຄ້າ, ເຊິ່ງສາມາດໃຊ້ເວລາເຖິງ 3 ມື້ເພື່ອຂັບລົດໄປເຖິງບ້ານ ແລະເລາະເກັບຊື້ຈົນເຕັມຄັນລົດ. (WB, ເດືອນມິຖຸນາ 2018). ຍ້ອນວ່າ ເປົ້າໝາຍຫຼັກຂອງການປູກເຂົ້າຂອງຊາວນາສ່ວນຫຼາຍແມ່ນປູກເພື່ອກຸ້ມກັບການບໍລິໂພກຂອງຕົນເອງ ແລະ ຍ້ອນການຜະລິດຂະໜາດໜ້ອຍ, ສ່ວນເກີນທີ່ຂາຍໃຫ້ຜູ້ເກັບຊື້ຮວບຮວມຕາມປົກກະຕິຈຶ່ງມີປະລິມານໜ້ອຍຫຼາຍ. ນອກຈາກນັ້ນ, ຊາວນາບ່ອຍແມ່ນມີທ່າອ່ຽງທີ່ຈະຂາຍເຂົ້າພຽງແຕ່ຕາມຈໍານວນທີ່ເຂົາເຈົ້າຕ້ອງ ການເພື່ອແລກປ່ຽນເປັນເງິນສົດທີ່ຈໍາເປັນໃນທັນທີທັນໃດຂອງຕົນ ແລະ ຈະຮັກສາສ່ວນທີ່ຍັງເຫຼືອໄວ້, ຈະຂາຍອີກຄັ້ງຕໍ່ໄປກໍ່ຕໍ່ເມື່ອມີຄວາມຕ້ອງການເງິນສົດອີກເທົ່ານັ້ນ.

250. **ໂຮງສີເຂົ້າຂະໜາດນ້ອຍ ທີ່ໃຊ້ເຕັກໂນໂລຊີເກົ່າມີຜະລິດຕະພາບທີ່ຕໍ່າກວ່າເມື່ອທຽບໃສ່ກັບໂຮງສີໃໝ່.** ຄວາມບໍ່ມີປະສິດທິພາບໃນການສີເຂົ້າແມ່ນກ່ຽວຂ້ອງກັບການມີການດໍາເນີນງານຂອງໂຮງສີຂະໜາດນ້ອຍຈໍານວນຫຼາຍເຊິ່ງຍັງນໍາໃຊ້ເຕັກໂນໂລຊີເກົ່າທີ່ຕັ້ງຢູ່ຕາມທ້ອງທີ່ຕ່າງໆ. ຄຸນລັກສະນະການດໍາເນີນງານ ຂອງໂຮງສີໃນ ສປປ ລາວ ແມ່ນການສະໜອງຕອບແບບທໍາມະຊາດຕໍ່ຄວາມຕ້ອງການ ຂອງຜູ້ປູກເຂົ້າຂະໜາດນ້ອຍ ເຊິ່ງຈຸດປະສົງຫຼັກໃນການປູກເຂົ້າແມ່ນເພື່ອການຜະລິດເຂົ້າເພື່ອບໍລິໂພກເອງໃນຄອບຄົວ. ປະສິດທິພາບການສີເຂົ້າໃນ ສປປ ລາວ ຢູ່ໃນລະຫວ່າງ 55 ສ່ວນຮ້ອຍ ຫາ 65 ສ່ວນຮ້ອຍ, ເມື່ອປຽບທຽບກັບ 66 ສ່ວນຮ້ອຍໃນປະເທດໄທ ແລະ ຫວຽດນາມ ແລະ 64 ສ່ວນຮ້ອຍໃນກໍາປູເຈຍ (ທະນາຄານໂລກ, ເດືອນມິຖຸນາ 2018).

36. ທະນາຄານໂລກ (ມິຖຸນາ 2018).
37. ລາຄາເຂົ້າເປືອກທີ່ມີຄວາມຊຸ່ມ 14 ສ່ວນຮ້ອຍ; ເຂົ້າໜຽວສໍາລັບ ສປປ ລາວ, ປະເພດເຂົ້າທີ່ປູກຫຼາຍທີ່ສຸດໃນປະເທດ, ແລະ ເຂົ້າຈ້າວທໍາມະດາ ຂອງບັນດາປະເທດອື່ນໆທັງໝົດເມື່ອສົມທຽບໃສ່ກັນ (WB, ເດືອນມິຖຸນາ 2018).

251. **ການຂາດປະສິດທິພາບໃນການຂາຍແມ່ນຍ້ອນການດໍາເນີນການຂະໜາດນ້ອຍເຊັ່ນກັນ**. ນອກຈາກຄ່າໃຊ້ຈ່າຍທີ່ສູງໃນຈຸດຂາຍເນື່ອງຈາກການດໍາເນີນການຂະໜາດນ້ອຍ, ສິ່ງນີ້ໄດ້ສົ່ງຜົນກະທົບຕໍ່ການເພີ່ມຄ່າຂົນສົ່ງຈາກໂຮງສີໄປເຖິງຈຸດມອບຮັບຍ້ອນວ່າການສັ່ງຊື້ຂອງພໍ່ຄ້າຂາຍຍົກ ຂ້ອນຂ້າງທີ່ຈະມີໜ້ອຍກວ່າປະລິມານທີ່ມີປະສິດທິພາບ, ຊຶ່ງເປັນການບັນຈຸຂອງລົດບັນທຸກເຕັມຄັນຄື 30 ໂຕນ (WB, ເດືອນມິຖຸນາ 2018). ລາຄາສໍາລັບການຂົນສົ່ງດ້ວຍລົດບັນທຸກແມ່ນຄິດຄ່າຂົນສົ່ງຕໍ່ຖ້ຽວ, ການຂົນສິນຄ້າເຄິ່ງລົດບັນທຸກຈະເສຍຄ່າຂົນສົ່ງສອງເທົ່າຕໍ່ຫົວໜ່ວຍການຂົນສົ່ງເມື່ອທຽບກັບການບັນທຸກເຕັມລົດ. ສິ່ງດັ່ງ ກ່າວຊຸກຍູ້ໃຫ້ມີການນໍາໃຊ້ພາຫະນະທີ່ມີຂະໜາດນ້ອຍກວ່າເພື່ອຂົນສົ່ງເຂົ້າຈາກໂຮງສີໄປຮອດຈຸດມອບຮັບ. ອັນນີ້ຊ່ວຍຫຼຸດຜ່ອນຄ່າຂົນສົ່ງແຕ່ມີລາຄາແພງກວ່າການໃຊ້ລົດຂົນສົ່ງ ທີ່ໃຫຍ່ກວ່າທີ່ມີການບັນທຸກເຕັມລົດ.

**ຂໍ້ສະເໜີແນະສໍາລັບການເພີ່ມມູນຄ່າເພີ່ມຂອງເຂົ້າ**

252. **ສົ່ງເສີມການເຮັດເປັນທຸລະກິດ ແລະ ລິເລີ່ມການຜະລິດເຂົ້າໜຽວຊະນິດພິເສດ ເພື່ອການບໍລິ ໂພກພາຍໃນ ແລະ ສົ່ງອອກ**. ສ.ປ.ປ ລາວ ມີຄວາມເປັນເອກະລັກສະເພາະທາງດ້ານການເປັນເມືອງຫຼວງຂອງເຂົ້າໜຽວ ແລະ ອຸດົມສົມບູນໄປດ້ວຍເຂົ້າໜຽວພື້ນເມືອງຫຼາຍຊະນິດທີ່ມີຮູບຮ່າງ, ຂະໜາດ, ສີ, ເນື້ອເມັດ, ລົດຊາດ, ກິ່ນຫອມ ແລະ ຄຸນສົມບັດທາງໂພຊະນາການແຕກຕ່າງກັນ. ອັນນີ້ເຮັດໃຫ້ ສປປ ລາວ ມີຄວາມເດັ່ນແຕກຕ່າງໄປຈາກປະເທດຜູ້ຜະລິດເຂົ້າລາຍອື່ນໆໃນພາກພື້ນ ແລະ ໃນໂລກ ແລະ ເປັນການໃຊ້ທ່າແຮງປຽບທຽບທີ່ມີຢູ່ແລ້ວ ເພື່ອພັດທະນາຕໍ່ຍອດ ແທນທີ່ຈະໄປສົ່ງເສີມການຜະລິດເຂົ້າຈ້າວປົກກະຕິເພື່ອການສົ່ງອອກ ເຊິ່ງຜູ້ຜະລິດຂອງລາວມີຄວາມສາມາດແຂ່ງຂັນໜ້ອຍ. ການພັດທະນາຜະລິດຕະພັນພິເສດຈະຕ້ອງມີການຄົ້ນຄວ້າ, ການທົດລອງໃນການພັດທະນາຜະລິດຕະພັນສິນຄ້າ, ການສຶກສາອິບຣິມຜູ້ຊົມໃຊ້ ແລະການຕະຫຼາດ.

253. **ການເພີ່ມຜະລິດຕະພາບ ໃຫ້ແກ່ຜູ້ຜະລິດຂະໜາດນ້ອຍ**. ການຂາດປະສິດທິພາບໃນຂະແໜງເຂົ້າ ຂອງ ສປປ ລາວ ສ່ວນຫຼາຍແມ່ນເປັນບັນຫາໃນດ້ານລະບົບ ແລະ ດ້ານໂຄງສ້າງໃນແຕ່ລະຂອດຂອງລະບົບຕ່ອງໂສ້ມູນຄ່າ. ການປູກຝັງລ້ຽງສັດຂະໜາດນ້ອຍ ເພື່ອການດໍາລົງຊີບ ສົ່ງຜົນໃຫ້ມີຕົ້ນທຶນສູງໃນການຜະລິດຕໍ່ຫົວໜ່ວຍ ຢູ່ໃນລະດັບຟາມ, ໃນການເກັບຮວບຮວມ ແລະ ໃນການສີ. ການຂາຍຍົກ ແລະ ຂາຍຍ່ອຍຂະໜາດນ້ອຍເຮັດໃຫ້ຕົ້ນທຶນ ຕໍ່ຫົວໜ່ວຍການຂົນສົ່ງ ແລະຄ່າໃຊ້ຈ່າຍສິ້ນເປືອງໃນການດໍາເນີນງານເພີ່ມຂຶ້ນ, ເຊິ່ງເຮັດໃຫ້ລາຄາຂາຍຍ່ອຍສູງຂຶ້ນຕາມມາ.

254. **ວິທີການສົ່ງເສີມຜະລິດຕະພາບທີ່ເພີ່ມຂຶ້ນ ລວມມີການສົ່ງເສີມຊາວກະສິກອນທີ່ນໍາໜ້າຢູ່ທ້ອງຖິ່ນຕ່າງໆ ທີ່ສາມາດລົງທຶນໃນເນື້ອທີ່ຫຼາຍຮ້ອຍເຮັກຕາ, ໃນພື້ນຖານໂຄງລ່າງ ແລະ ເຄື່ອງກົນຈັກ**. ຊາວກະ ສິກອນທີ່ນໍາໜ້າເຫຼົ່ານີ້, ນອກຈາກດໍາເນີນການໃນຟາມ ຂອງຕົນເອງແລ້ວ, ຈະດຶງດູດຊາວນາລາຍນ້ອຍໃນພື້ນທີ່ໃຫ້ເຂົ້າຮ່ວມໃນລະບົບການຜະລິດກະສິກໍາແບບສັນຍາຜູກພັນສອງສົ້ນ. ຊາວນາລາຍນ້ອຍຈະໄດ້ຮັບຜົນປະໂຫຍດຈາກການໄດ້ຮັບນໍ້າຊົນລະປະທານສໍາລັບການປູກພືດລະດູແລ້ງ, ແນວພັນທີ່ມີຄຸນນະພາບສູງ ແລະ ວັດຖຸປະກອນທີ່ຈໍາເປັນອື່ນໆເພື່ອຮັບໃຊ້ການຜະລິດ, ເຄື່ອງກົນຈັກໃນການກະກຽມດິນແລະການເກັບກ່ຽວ ແລະການເຂົ້າເຖິງຕະຫຼາດ, ໃນຂະນະທີ່ຊາວກະສິກອນທີ່ນໍາໜ້າຈະໄດ້ຮັບຜົນປະໂຫຍດຈາກປະລິ ມານທີ່ມີຫລາຍກວ່າ ແລະ ການແບ່ງປັນຄວາມສ່ຽງກັບຜູ້ຜະລິດລາຍນ້ອຍ. ອັນນີ້ຈະສ້າງໃຫ້ເກີດກຸ່ມການຜະລິດຢ່າງມີຜົນ, ເປັນການຮວບຮວມທີ່ຕັ້ງການເກັບຮັກສາຜົນຜະລິດ ໃຫ້ເຂົ້າມາຢູ່ນໍາກັນ ໃຫ້ມີບໍລິມາດຫຼາຍ, ເປັນການຫຼຸດຜ່ອນຕົ້ນທຶນວັດຖຸປະກອນຮັບໃຊ້ການຜະລິດ ແລະ ປະຢັດຄ່າຂົນສົ່ງຈາກຟາມໄປຫາໂຮງສີ.

255. **ຊຸກຍູ້ການລົງທຶນຂອງເອກະຊົນເຂົ້າໃນການຮວບຮວມ ແລະ ການເກັບຮັກສາໃນເຂດຜະລິດເຂົ້າຕົ້ນຕໍ ເພື່ອຫຼຸດຄ່າຂົນສົ່ງໃນຟາມ ແລະ ຄ່າເກັບຮວບຮວມ**. ຜູ້ຮວບຮວມ ແລະ ຜູ້ເກັບຊື້ຍັງອາດສາມາດຂາຍວັດຖຸປະກອນຮັບໃຊ້ການຜະລິດກະສິກໍາ ແລະ ໃຫ້ຄໍາແນະນໍາດ້ານວິຊາການກ່ຽວກັບວິທີປະຕິບັດທາງກະສິກໍາທີ່ມີປະສິດທິພາບກວ່າ.

256. **ການຫຼຸດຜ່ອນຕົ້ນທຶນຂອງວັດຖຸປະກອນຮັບໃຊ້ການຜະລິດກະສິກໍາ**. ຄ່າໃຊ້ຈ່າຍສິ້ນເປືອງທີ່ສູງດ້ານຊົນລະປະທານຍັງສົ່ງຜົນກະທົບຕໍ່ການເພີ່ມຕົ້ນທຶນທາງດ້ານເສດຖະກິດຂອງອຸປະກອນກະສິກໍາ ແລະເຄື່ອງກົນຈັກ, ເພາະມັນຈະບໍ່ສົ່ງເສີມໃຫ້ຊາວກະສິກອນສົນໃຈມາເຮັດນາແຊງ. ຊົນລະປະທານຮຽກຮ້ອງໃຫ້ມີການເຮັດນາສອງລະດູຈຶ່ງຈະປະສົບຜົນສໍາເລັດໄດ້ທາງດ້ານການເງິນ.

257. **ການເພີ່ມຜະລິດຕະພາບໃນລະບົບຕ່ອງໂສ້ມູນຄ່າເຂົ້າ ຮຽກຮ້ອງໃຫ້ມີການປະຕິຮູບນະໂຍບາຍ ແລະ ລະບຽບການຕ່າງໆຫລາຍຢ່າງ**. ສິ່ງເຫຼົ່ານີ້ຈະຊຸກຍູ້ການລົງທຶນ ແລະ ການນໍາໃຊ້ຊັບພະຍາກອນໃຫ້ມີປະສິດທິພາບຫຼາຍຂຶ້ນໃນແຕ່ລະຂັ້ນຕອນຂອງລະບົບຕ່ອງໂສ້ມູນຄ່າ. ກອງເນື້ອຄວາມຂ້າງລຸ່ມນີ້ (6.1) ໄດ້ລຽງລາຍຊື່ເຄື່ອງມືນະໂຍບາຍໃນແຕ່ລະຂອດຂອງຕ່ອງໂສ້ມູນຄ່າ.

## ກ່ອງເນື້ອຄວາມ 6.1 ເຄື່ອງມືນະໂຍບາຍເພື່ອເພີ່ມການລົງທຶນ ແລະ ປະສິດທິພາບໃນ ຕ່ອງໂສ້ມູນຄ່າເຂົ້າ.

**ວັດຖຸປະກອນຮັບໃຊ້ການຜະລິດ**

ລົງທຶນໃສ່ເມັດພັນປັບປຸງ

ເພີ່ມປະສິດທິພາບຂອງສິ່ງແວດລ້ອມທີ່ເອື້ອອຳນວຍແກ່ການດຳເນີນທຸລະກິດຂອງພາກເອກະຊົນໃນດ້ານການຜະລິດ ແລະການເພີ່ມປະລິມານເມັດພັນ

ເພີ່ມປະສິດທິພາບຂອງການຄວບຄຸມຄຸນນະພາບຂອງວັດຖຸປະກອນຮັບໃຊ້ການຜະລິດກະສິກຳ (ເມັດພັນ, ຝຸ່ນ, ສານເຄມີ)

**ການຜະຜລິດເຂົ້າເປືອກ**

ລຶບລ້າງຂໍ້ກຳນົດການນຳໃຊ້ທີ່ດິນປູກເຂົ້າ

ປັບປຸງຄຸນນະພາບຂອງການລົງທຶນດ້ານຊົນລະປະທານ

ສ້າງຄວາມເຂັ້ມແຂງແກ່ວຽກງານສົ່ງເສີມກະສິກຳ ແລະ ການຝຶກອົບຮົມວິຊາຊີບສຳລັບການຫັນເປັນກົນຈັກໃນກະສິກຳ

ລົງທຶນໃນແຜນງານໂຄງການດ້ານການຄຸ້ມຄອງທາດບຳລຸງດິນ ແລະ ຄວບຄຸມສັດຕູພືດແບບປະສານກົມກຽວ

ອອກແບບແຜນງານສະໜັບສະໜູນຊາວນາແມ່ຍິງ ແລະ ໂພສະນາການ

**ການສີເຂົ້າ**

ປັບປຸງສະພາບແວດລ້ອມທີ່ເອື້ອອຳນວຍໃຫ້ແກ່ການລົງທຶນຂອງເອກະຊົນ

ອຳນວຍຄວາມສະດວກແກ່ການເຮັດສັນຍາຜູກພັນສອງສົ້ນ ກັບໂຮງສີເຂົ້າ

ສົ່ງເສີມໃຫ້ໂຮງສີເຂົ້ານຳໃຊ້ເຕົາແກສຊີວະມວນແກບເພື່ອຜະລິດພະລັງງານທີ່ເປັນມິດຕໍ່ສິ່ງແວດລ້ອມ

ສົ່ງເສີມການຕື່ມສານອາຫານໃສ່ເຂົ້າ ແລະ ການຍັ້ງຢືນການຄຸ້ມຄອງຄວາມປອດໄພອາຫານຂອງໂຮງສີເຂົ້າ

**ການຄ້າ**

ຮັບປະກັນໃຫ້ມີນະໂຍບາຍການຄ້າທີ່ຄາດຄະເນໄດ້ກວ່ານີ້

ພັດທະນາກາຍີ່ຫຍໍ້ເຂົ້າ

ສະໜັບສະໜູນວຽກງານສືບຂ່າວທາງດ້ານການຕະຫຼາດແລະການເປີດປັ້ນ(ໂຄສະນາ)ການຕະຫຼາດ

ຫຼຸດຜ່ອນຕົ້ນທຶນທາງການຄ້າຜ່ານການປັບປຸງການອຳນວຍຄວາມສະດວກທາງດ້ານການຄ້າ ແລະ ວຽກງານໂລຊິດສະຕິກ.

*ແຫຼ່ງຂໍ້ມູນ: ບົດຮຽນທີ່ຖອດຖອນໄດ້: ການນຳໃຊ້ປະໂຫຍດຈາກລະບົບຕ່ອງໂສ້ມູນຄ່າເຂົ້າເພື່ອຫຼຸດຜ່ອນຄວາມທຸກຍາກໃນກຳປູເຈຍ, ສປປ ລາວ ແລະ ມຽນມາ, ທະນາຄານໂລກ, 2016*

### 6.3.2 ພືດຜັກ

258. **ຄວາມເປັນມາ.** ພືດຜັກທີ່ປູກຢູ່ໃນ ສປປ ລາວ ແມ່ນມີຫຼາຍຊະນິດ, ຕົ້ນຕໍແມ່ນເພື່ອຕອບສະໜອງຄວາມຕ້ອງການອາຫານພື້ນເມືອງຂອງລາວ. ມັນປະກອບມີເຄື່ອງເທດຫຼາຍຊະນິດ, ພືດສະໝຸນໄພ, ຮາກ, ລຳຕົ້ນ, ຫົວ, ໃບ, ດອກໄມ້, ໝາກໄມ້ ແລະ ແກ່ນ. ໃນໄລຍະ 10 ປີຂອງປີ 2009 - 18, ການຜະລິດພືດຜັກໃນ ສປປ ລາວ ໄດ້ຂະຫຍາຍຕົວຂ້ອນຂ້າງໄວ ເພື່ອຕອບສະໜອງຕໍ່ການຂະຫຍາຍຕົວຂອງປະຊາກອນ, ລາຍຮັບ, ການຫັນເປັນຕົວເມືອງ, ການທ່ອງທ່ຽວ ແລະ ການຄ້າ. ຜົນຜະລິດສະເລຍຕໍ່ປີໃນໄລຍະ 5 ປີ ໄດ້ເພີ່ມຂຶ້ນ 40 ສ່ວນຮ້ອຍ ຈາກ 1,1 ລ້ານໂຕນ ໃນໄລຍະປີ 2009 - 13 ເປັນ 1,5 ລ້ານໂຕນ ໃນໄລຍະ 2014 - 18. ໃນໄລຍະດຽວກັນ, ເນື້ອທີ່ເກັບກູ້ສະເລຍຕໍ່ປີເພີ່ມຂຶ້ນໜຶ່ງສ່ວນສາມ.13 ພາກ

ໃຕ້ຜະລິດໄດ້ ປະມານເຄິ່ງໜຶ່ງຂອງຜົນຜະລິດພືດຜັກທັງໝົດ ຂອງ ສປປ ລາວ, ສ່ວນພາກກາງ ຜະລິດໄດ້ດ້ວຍສ່ວນແບ່ງ 28 ສ່ວນຮ້ອຍ (ຕາຕະລາງ 6.4). ທັງສາມພາກໄດ້ຂະຫຍາຍເນື້ອທີ່ປູກຝັງ ເຊິ່ງພາກໃຕ້ແມ່ນໄດ້ເພີ່ມຂຶ້ນໄວກວ່າ.

259. **ຊາວສວນຜັກສ່ວນໃຫຍ່ຍັງປູກເຂົ້າ, ປູກພືດອື່ນໆ ແລະ ລ້ຽງສັດ, ເຖິງແມ່ນວ່າສ່ວນຫຼາຍແມ່ນເພື່ອການລ້ຽງຊີບ.** ການປູກພືດຜັກແມ່ນໄດ້ກາຍເປັນການປູກເປັນສິນຄ້າຫຼາຍຂຶ້ນແລະເພື່ອສະໜອງຕະຫຼາດການບໍລິໂພກໃນຕົວເມືອງພາຍໃນປະເທດ ແລະ ຕະຫລາດນັກທ່ອງທ່ຽວ ທີ່ກຳລັງຂະຫຍາຍຕົວ ແລະ ຕະຫຼາດສົ່ງອອກສ່ວນໃຫຍ່ແມ່ນໃນປະເທດຈີນ, ໄທ ແລະ ຫວຽດນາມ. ຕະຫຼາດຜັກພາຍໃນປະເທດທີ່ສຳຄັນ ລວມມີ ນະຄອນຫຼວງວຽງຈັນ ທີ່ມີການຂະຫຍາຍຕົວຂ້ອນຂ້າງຢ່າງໄວວາ ແລະ ຫຼາຍຕົວເມືອງອື່ນໆ ລວມທັງ ນະຄອນປາກເຊ ຂອງແຂວງຈຳປາສັກຢູ່ ພາກໃຕ້, ນະຄອນໄກສອນ ພົມວິຫານ ຂອງແຂວງສະຫວັນນະເຂດ ທີ່ຢູ່ໃຕ້ສຸດຂອງພາກກາງ ແລະ ບັນດາເມືອງ ແລະ ນະຄອນ ທ່ອງທ່ຽວຫຼັກໆ ເຊັ່ນ: ເມືອງວັງວຽງ ຂອງແຂວງວຽງຈັນຢູ່ເບື້ອງເໜືອ ຂອງພາກກາງ ແລະ ນະຄອນຫຼວງພະບາງທາງພາກເໜືອ.

260. **ຜົນການຈັດຕັ້ງປະຕິບັດທີ່ຜ່ານມາ ແລະ ທ່າອ່ຽງ.** ຜູ້ບໍລິໂພກຜັກໃນ ສປປ ລາວ ນິຍົມພືດສະໝູນໄພ, ເຄື່ອງເທດ ແລະ ຜັກທີ່ມີລົດຊາດ ຫຼາຍໆຊະນິດ ເພື່ອໃຫ້ມີລົດຊາດ ແລະ ກິ່ນຫອມ ແລະ ເພື່ອສັບພະຄຸນທາງຢາ. ຜູ້ບໍລິໂພກພາຍໃນລາວສ່ວນໃຫຍ່, ບໍ່ຂຶ້ນກັບລາຍຮັບ ແລະ ລະດັບການສຶກສາ, ເຂົາເຈົ້າມັກຜັກອິນຊີ ຫຼື ປະເພດທີ່ມີສານເຄມີໜ້ອຍທີ່ສຸດ. ອັນນີ້ອາດຈະເປັນຜົນລວມຂອງການເສບຂ່າວສານຈາກສື່ມວນຊົນ, ການສົ່ງເສີມ "ກະສິກຳສະອາດ" ຢ່າງເປັນທາງການ ແລະ ການສຶກສາຢ່າງເປັນທາງການໃນບັນດາຄົນລຸ່ນໜຸ່ມ.

261. **ການເຕີບໂຕຂອງການຜະລິດພືດຜັກໃນບໍ່ດົນມານີ້ ໄດ້ຮັບການກະຕຸກຊຸກຍູ້ໂດຍຄວາມຕ້ອງການ ຂອງຕະຫຼາດທີ່ກຳລັງມີການຂະຫຍາຍຕົວ.** ປັດໄຈຂອງການເຕີບໂຕປະກອບດ້ວຍລາຍໄດ້ທີ່ເພີ່ມຂຶ້ນ, ການເຫັນບົດຮຽນໃນການປຸງແຕ່ງອາຫານຂອງຕ່າງປະເທດ ແລະ ວິທີການບໍລິໂພກຜັກ (ເຊັ່ນ: ການເຮັດເຄື່ອງດື່ມ), ຄວາມຕື່ນຕົວທີ່ເພີ່ມຂຶ້ນຂອງຜູ້ບໍລິໂພກທ້ອງຖິ່ນຂອງລາວກ່ຽວກັບຜົນປະໂຫຍດດ້ານສຸຂະພາບຂອງຕົນ ແລະ ຄວາມຕ້ອງການທີ່ເພີ່ມຂຶ້ນຈາກຕະຫຼາດການທ່ອງທ່ຽວ ແລະ ການສົ່ງອອກ. ຕະຫຼາດສົ່ງອອກໄດ້ຊຸກຍູ້ການຜະລິດຜັກບາງປະເພດເຊັ່ນ: ກະລໍ່າປີ, ກາຣົດ, ກະລໍ່າດອກ, ມັນດ້າງ, ຫົວຫລືໜໍ່ໃຕ້ດິນຂອງພືດ, ຜັກບົ່ວຫົວແດງ, ຜັກບົ່ວຫົວໃຫຍ່, ຫົວຜັກທຽມ, ຫົວຜັກທຽມຫອມ, ຫົວຜັກກາດ, ຜັກບົ່ວລະພາ, ຜັກຫອມເປ, ໝາກເຜັດ, ຜັກສະຫລັດ, ຜັກບົ້ງ. ເຖິງວ່າຈະມີການຂະຫຍາຍຕົວທີ່ຜ່ານມາ, ພືດຜັກທີ່ມີຄຸນນະພາບສູງຫຼາຍຊະນິດທີ່ໃຫ້ບໍລິການໃນໂຮງແຮມແລະຮ້ານອາຫານຊັ້ນສູງໄດ້ຖືກນຳເຂົ້າ, ເຊິ່ງເຮັດໃຫ້ມີໂອກາດສຳລັບການພັດທະນາໃນຕໍ່ໄປ.

262. **ການຫັນປ່ຽນປະເພດການຜະລິດພືດຜັກ ຕາມພາກອາດເກີດຂຶ້ນແລ້ວ ໃນໄລຍະປີ 2009 – 18.** ການຜະລິດພືດຜັກໄດ້ຂະຫຍາຍຕົວໄວທີ່ສຸດຢູ່ພາກໃຕ້ ເຊິ່ງຜົນຜະລິດ, ວັດແທກເປັນໂຕນເພີ່ມຂຶ້ນເກືອບ 98 ສ່ວນຮ້ອຍ ແລະ ເນື້ອທີ່ເກັບກູ້ເພີ່ມຂຶ້ນ 66 ສ່ວນຮ້ອຍຈາກຄ່າສະເລ່ຍຕໍ່ປີໃນໄລຍະ ຫ້າປີລະຫວ່າງ 2009 - 13 ແລະ ໄລຍະ 2014 - 18. ດັ່ງນັ້ນ, ສ່ວນແບ່ງ ຂອງພາກໃຕ້ໃນພູດລວມ ໄດ້ເພີ່ມຂຶ້ນຈາກ 36 ສ່ວນຮ້ອຍເປັນ 50 ສ່ວນຮ້ອຍຂອງນ້ຳໜັກຜົນຜະລິດ ແລະ 29 ສ່ວນຮ້ອຍເປັນ 36 ສ່ວນຮ້ອຍຂອງເນື້ອທີ່ເກັບກູ້ໃນໄລຍະນີ້ (ຕາຕະລາງ 6.4). ການເພີ່ມຂຶ້ນຢ່າງໄວວາຂອງຜົນຜະລິດທາງດ້ານນ້ຳໜັກແມ່ນມາຈາກການຜະລິດຜັກກະລໍ່າປີເພື່ອສົ່ງອອກໄປປະເທດໄທ. ໃນໄລຍະດຽວກັນນີ້, ພາກກາງມີຜົນຜະລິດສະເລ່ຍຕໍ່ປີທີ່ວັດແທກເປັນໂຕນຫຼຸດລົງເລັກນ້ອຍ, ແຕ່ກໍ່ເປັນຜົນມາຈາກການປ່ຽນແປງການກະຈຸກຕົວ ຂອງຜົນຜະລິດຈາກຜັກທີ່ມີມູນຄ່າຕ່ຳ (ຕໍ່ຫນ່ວຍນ້ຳໜັກ) ໄປສູ່ຜັກທີ່ມີມູນຄ່າສູງກວ່າເຊັ່ນ: ພືດສະໝຸນໄພ, ໃນຂະນະທີ່ເນື້ອທີ່ເກັບກູ້ໄດ້ເພີ່ມຂຶ້ນເກືອບ 13 ສ່ວນຮ້ອຍ.

## ຕາຕະລາງ 6.2 ການປ່ຽນແປງໃນດ້ານການຜະລິດພືດຜັກ ຂອງ ສປປ ລາວ: 2009-2018

| ຂອງຊາດ | ຜົນຜະລິດ(1.000 ໂຕນ)* | | | % ໃນຜົນຜະລິດແຫ່ງຊາດ* | | ເນື້ອທີ່ເກັບກູ້ (ຮຕ)* | | |
|---|---|---|---|---|---|---|---|---|
| ຂອງພາກ | 2009-13 | 2014-18 | % ການປ່ຽນແປງ | 2009-13 | 2014-18 | 2009-13 | 2014-18 | % ການປ່ຽນແປງ |
| ຂອງຊາດ | 1.086,5 | 1.526,4 | 40,5% | 100,0 | 100,0 | 128.389 | 169.485 | 32,0% |
| ເໜືອ | 268,6 | 337,3 | 25,6% | 24,7 | 22,1 | 36.499 | 46.200 | 26,6% |
| ກາງ | 430,1 | 422,7 | -1,7% | | | | | |
| 39,6 | 27,7 | 54.831 | 61.812 | 12,7% | | | | |
| ໃຕ້ | 387,8 | 766,4 | 97,6% | 35,7 | 50,2 | 37.059 | 61.473 | 65,9% |

** ຄິດໄລ່ເປັນຄ່າສະເລ່ຍຕໍ່ປີ. ແຫລ່ງທີ່ມາ ຂອງຂໍ້ມູນ: https://laosis.lsb.gov.la/ (ເຂົ້າເບິ່ງຄັ້ງວັນທີ 1 ກັນຍາ 2020)*

263. **ການເຕີບໂຕຂອງຜົນຜະລິດສ່ວນໃຫຍ່ແມ່ນມາຈາກການຂະຫຍາຍເນື້ອທີ່ດິນ.** ໃນທົດສະວັດທີ່ຜ່ານມາ, ໄດ້ຄ່ອຍໆປາກົດມີການປູກພືດຜັກແບບສະໄໝໃໝ່, ໂດຍປູກເປັນສິນຄ້າ ແລະ ອີງໃສ່ເຕັກນິກ, ເຕັກໂນໂລຊີ ແລະ ອຸປະກອນ ທີ່ທັນສະໄໝຂຶ້ນ. ເຖິງຢ່າງໃດກໍຕາມ, ວິທີການປູກ ແລະ ບໍລິຫານຈັດການຟາມຜະລິດຜັກແບບດັ້ງເດີມ, ການປູກຝັງແບບ

ຄອບຄົວດ້ວຍເຄື່ອງມື ແລະ ອຸປະກອນແບບດັ້ງເດີມກໍຍັງຄົງມີບົດບາດສຳຄັນຢູ່. ດັ່ງນັ້ນ, ຟາມປູກຜັກທີ່ເປັນແບບສະບັບ ໃນ ສປປ ລາວ ແມ່ນຂ້ອນຂ້າງມີຜະລິດຕະພາບ ແລະ ຄຸນນະພາບຂອງຜະລິດຕະພັນຕ່ຳ.

264. **ການຈັດຈຳໜ່າຍ, ຕະຫຼາດພາຍໃນ ແລະ ສົ່ງອອກ**. ຢູ່ໃນ ສປປ ລາວ, ໃນຂະນະທີ່ບັນດາຮ້ານສັບພະສິນຄ້າທັນສະໄໝ ແລະ ຮ້ານສະດວກຊື້ທີ່ຈຳໜ່າຍຜົນຜະລິດສົດແມ່ນໄດ້ຄ່ອຍໆປາກົດຕົວຂຶ້ນຢູ່ໃນເມືອງໃຫຍ່, ພືດຜັກສ່ວນຫຼາຍແມ່ນຂາຍຢູ່ຕະຫຼາດສົດ, ເຊິ່ງລາຄາຂາຍຍ່ອຍຈະຕ່ຳກວ່າ ແລະ ເປັນບ່ອນທີ່ຄົວເຮືອນຄົນລາວສ່ວນໃຫຍ່ຊື້ອາຫານ. ພືດຜັກສ່ວນຫຼາຍທີ່ຂາຍຢູ່ຕະຫຼາດສົດໃນທ້ອງຖິ່ນແມ່ນປູກຢູ່ຕາມສວນນ້ອຍໆຫຼັງເຮືອນໃນເຂດຊົນນະບົດ ຫຼື ແປງດິນນ້ອຍໆທີ່ຢູ່ຕິດກັບທົ່ງນາ ຫຼືບາງສ່ວນ ຂອງທົ່ງນາຫຼັງຈາກເກັບກ່ຽວເຂົ້ານາລະດູຝົນແລ້ວ. ຟາມຜັກທີ່ປູກເພື່ອເປັນສິນຄ້າສ່ວນຫຼາຍແມ່ນມີຂະໜາດນ້ອຍ, ໂດຍທົ່ວໄປແລ້ວປະມານໜຶ່ງສ່ວນສາມຂອງເຮັກຕາ ແລະເປັນແບບຄອບຄົວ, ເຖິງວ່າຈະມີການຂະຫຍາຍຕົວຂອງຕົວເມືອງ, ການທ່ອງທ່ຽວ, ການຄ້າລະຫວ່າງປະເທດທີ່ສ້າງຄວາມຕ້ອງການຂອງການຜະລິດຜັກທີ່ຫຼາຍຂຶ້ນ.

265. **ການຂະຫຍາຍຕົວຢ່າງໄວວາໃນຕະຫຼາດສົ່ງອອກພືດຜັກຂອງ ສປປ ລາວ ແມ່ນຢູ່ປະເທດໄທ ແລະ ສປ ຈີນ; ຢ່າງໃດກໍ່ຕາມ, ຍັງມີການສົ່ງອອກໄປຍັງ EU ດ້ວຍ**. ການສົ່ງອອກພືດຜັກໄດ້ເພີ່ມຂຶ້ນຈາກ 14 ລ້ານໂດລາ ໃນປີ 2012 ເປັນ 133 ລ້ານໂດລາ ໃນປີ 2019. ສປປ ລາວ ຍັງນຳເຂົ້າຜັກຫຼາຍປະເພດ, ຕົ້ນຕໍແມ່ນຈາກປະເທດໄທ, ເຊັ່ນດຽວກັນກັບຈາກ ສປ ຈີນ ແລະ ຫວຽດນາມ, ແຕ່ໃນຈຳນວນໜ້ອຍກວ່າຫລາຍ. ສປປ ລາວ ຍັງນຳເຂົ້າຜັກ ເນື່ອງຈາກການສະໜອງຕາມລະດູການຂຶ້ນໆລົງໆ, ການຂາດແຄນຢູ່ພາຍໃນ ແລະ ເພື່ອໃຫ້ມີຫລາຍປະເພດຫລາຍຊະນິດ ແລະ ຫລາຍຄຸນນະພາບ. ຮ້ານອາຫານແລະໂຮງແຮມຊັ້ນສູງ, ນຳເຂົ້າຜັກຍ້ອນຕ້ອງການຄຸນນະພາບທີ່ດີ ແລະຄວາມໜ້າເຊື່ອຖື ຂອງການສະ ໜອງ. ການປູກພືດຜັກໃນ ສປປ ລາວ ຂາດຄວາມຫລາກຫລາຍທີ່ຈຳເປັນເພື່ອຕອບສະໜອງຄວາມຕ້ອງການ ຂອງຜູ້ບໍລິໂພກໃນຕົວເມືອງ, ແຂກຕ່າງປະເທດທີ່ເຂົ້າມາຢ້ຽມຢາມ ແລະ ນັກທ່ອງທ່ຽວ. ອັນນີ້ເປັນໂອກາດໃຫ້ຊາວກະສິກອນ ຂອງ ສປປ ລາວ ໃນການເພີ່ມທະວີການຜະລິດຜັກ.

266. **ຂໍ້ຈຳກັດລວມມີຕົ້ນທຶນການຜະລິດທີ່ສູງ ແລະ ການຈັດການຫຼັງການເກັບກູ້ທີ່ບໍ່ໄດ້ລະດັບ**. ການຜະລິດພືດຜັກໃນ ສປປ ລາວ ແມ່ນຂ້ອນຂ້າງມີຕົ້ນທຶນສູງ ຍ້ອນເຫດຜົນດຽວກັນກັບການຜະລິດເຂົ້າ ຄື: ຄ່າແຮງງານທີ່ຂ້ອນຂ້າງສູງ ແລະ ວັດຖຸປະກອນຮັບໃຊ້ການຜະລິດກະສິກຳອື່ນໆ, ການດຳເນີນງານຂະໜາດນ້ອຍ ແລະ ວິທີປະຕິບັດ ແລະ ການຄຸ້ມຄອງກິດຈະການຟາມແບບດັ້ງເດີມ. ການຄຸ້ມຄອງຫລັງການເກັບກູ້ທີ່ບໍ່ໄດ້ລະດັບ[38] ແມ່ນຂໍ້ຈຳກັດທີ່ສຳຄັນໃນຕ່ອງໂສ້ມູນຄ່າຜັກຈາກຟາມໄປເຖິງຕະຫຼາດຂາຍຍ່ອຍ. ສຳລັບການຂົນສົ່ງຈາກຟາມ, ໄດ້ມີການພົ່ມນ້ຳຜັກໃຫ້ຊຸ່ມ ແລະຍັດໃສ່ຖົງຢາງ ຫຼື ຫໍ່ດ້ວຍແຜ່ນ ພລາສຕິກ. ປົກກະຕິແລ້ວ, ເຫັນມີການຍັດຜັກໃສ່ຖົງຢາງຫຼາຍກວ່າປະລິມານທີ່ເໝາະສົມ, ເຊິ່ງກໍ່ໃຫ້ເກີດຄວາມເສຍຫາຍ. ເມື່ອບໍ່ມີລະບົບທຳຄວາມເຢັນ, ຜັກຕ້ອງໄດ້ຂົນສົ່ງໄປຕະຫຼາດຂາຍຍົກເພື່ອຂາຍໃຫ້ຜູ້ຂາຍຍ່ອຍ ແລະ ຜູ້ບໍລິໂພກສຸດທ້າຍພາຍໃນໜຶ່ງມື້. ຢູ່ຕະຫຼາດສົດແບບດັ້ງເດີມ, ເຊິ່ງເປັນບ່ອນທີ່ມີຮ້ານຂາຍຍ່ອຍຂະໜາດນ້ອຍຈຳນວນຫລວງຫຼາຍດຳເນີນການຂາຍຜັກເປັນສ່ວນໃຫຍ່ ແມ່ນຖືວ່າບໍ່ມີລະບົບທຳຄວາມເຢັນ, ສະນັ້ນວິທີດຽວທີ່ຜູ້ຂາຍຍ່ອຍສາມາດຮັກສາຄວາມສົດຂອງຜັກຂອງພວກເຂົາແມ່ນດ້ວຍການສີດຝົນນ້ຳໃສ. ໃນໄລຍະ 3 ວັນທີ່ຕ້ອງໄດ້ຂາຍຜັກອອກ, ເພື່ອຮັກສາຄວາມໜ້າດຶງດູດ, ຜູ້ຂາຍຍ່ອຍໄດ້ຕັດຊິ້ນສ່ວນທີ່ບໍ່ສົດແລະເນົ່າເປື່ອຍ, ເຮັດໃຫ້ເສຍນ້ຳໜັກ. ນອກຈາກນັ້ນ, ຜູ້ຄ້າຍ່ອຍຈຳເປັນຕ້ອງໄດ້ຫຼຸດລາຄາເລື້ອຍໆເພື່ອດຶງດູດຜູ້ຊື້ ແລະເພື່ອຫຼີກເວັ້ນການປະຖິ້ມສິນຄ້າ. ການສູນເສຍຜົນຜະລິດຫລັງການເກັບກູ້ທີ່ຂ້ອນຂ້າງສູງເຮັດໃຫ້ລາຄາຢູ່ໜ້າຟາມຫຼຸດລົງ.

267. **ການຂາດຄວາມຮັບຮູ້ກ່ຽວກັບຄວາມຮຽກຮ້ອງຕ້ອງການດ້ານ SPS ສຳລັບຕະຫຼາດສົ່ງອອກ**. ການຕອບສະໜອງຂໍ້ກຳນົດດ້ານ SPS ແມ່ນມີຄວາມຈຳເປັນຕໍ່ຕະຫຼາດສົ່ງອອກ, ແຕ່ວ່າ ຟາມຜະລິດຜັກໃນລາວ ສ່ວນໃຫຍ່ຍັງຂາດຄວາມສາມາດໃນການບັນລຸມາດຕະຖານນີ້, ສາເຫດຕົ້ນຕໍແມ່ນຍ້ອນລະດັບການສຶກສາ ຂອງຊາວກະສິກອນຍັງຕ່ຳ. ຢ່າງໃດກໍ່ຕາມ, ໃນບາງກໍລະນີມັນອາດຈະເປັນເລື່ອງ ຂອງການບໍລິ ຫານຈັດການຟາມທີ່ເຮັດບໍ່ໄດ້ດີ. ໃນຕົ້ນປີ 2016, ສະຫະພາບຢູໂຣບ ໄດ້ຫ້າມການນຳເຂົ້າຜັກ ຈາກ ສປປ ລາວ ເນື່ອງຈາກ ບໍ່ໄດ້ມາດຕະຖານ ດ້ານຄຸນນະພາບ.[39]

**ຂໍ້ສະເໜີແນະເພື່ອການປັບປຸງໃນຂະແໜງການ**

268. **ຈີນເປັນຕົວຢ່າງຂອງກາລະໂອກາດທີ່ສຳຄັນສຳລັບຜູ້ສົ່ງອອກຂອງ ສປປ ລາວ.** ໃນຖານະເປັນປະເທດເພື່ອນບ້ານໃກ້ຄຽງສຸດ, ໂດຍສະເພາະທີ່ມີການເຊື່ອມຕໍ່ກັບເສັ້ນທາງລົດໄຟຄວາມໄວສູງທີ່ເປີດໃຫ້ບໍລິການໃນທ້າຍປີ 2021, ຕົ້ນທຶນການຈັດສົ່ງໄປຕະຫຼາດປາຍທາງຄາດວ່າຈະຫຼຸດລົງ. ສປປ ລາວ ມີໂກຕາສົ່ງອອກສິນຄ້າຈາກ ສປ ຈີນ ສຳລັບສິນຄ້າກະສິກຳ 7 ປະເພດ ເຊິ່ງປະກອບມີ ເຂົ້າ, ຫມາກກ້ວຍ, ຫມາກໂມ, ມັນດ້າງ, ມັນຕົ້ນ, ສາລີ ແລະ ສັດລ້ຽງ; MOIC ພວມເຈລະຈາ 36 ຜະລິດຕະພັນກະເສດເພີ່ມຕື່ມທີ່ປະກອບມີຜັກ, ໝາກໄມ້ ແລະ ຊີ້ນ.[40] ການສົ່ງອອກໄປຈີນໂດຍຜ່ານການໃຫ້ໂກຕາດັ່ງກ່າວ, ເຖິງວ່າຈະຈຳກັດສະເພາະແຕ່ພືດຜົນທີ່ປູກຢູ່ໃນເຂດການຜະລິດທີ່ມີການກວດກາ ແລະ ອະນຸມັດໂດຍເຈົ້າ ໜ້າທີ່ຝ່າຍຈີນເທົ່ານັ້ນກໍ່ຕາມ, ແຕ່ກໍ່ຖືວ່າເປັນການເຮັດໃຫ້ງ່າຍຂຶ້ນ, ເພາະວ່າມັນບໍ່ຜ່ານຂັ້ນຕອນຕ່າງໆ ເຊິ່ງຕາມປົກກະຕິແມ່ນຈຳເປັນຕ້ອງຜ່ານກ່ອນ ແລະ ໃນລະຫວ່າງການຈັດສົ່ງຂ້າມຊາຍແດນ. ແນວໃດກໍ່ຕາມ, ເພື່ອເພີ່ມ

38. ທະນາຄານໂລກ (ມິຖຸນາ 2018).
39. ຜັກເຫຼົ່ານີ້ທີ່ EU ຫ້າມລວມມີ ຜັກບົ່ວລະພາ, ຜັກຫອມເປ, ພືດປະເພດໝາກພິກໄທ ແລະ ຜັກອີ່ເລີດ (ໜັງສືພິມວຽງຈັນ ທາຍ).
40. ໃນຈຳນວນ 7 ຜະລິດຕະພັນທີ່ໄດ້ຮັບໂກຕາສົ່ງອອກ, ເຂົ້າ, ໝາກກ້ວຍ, ໝາກໂມ, ມັນດ້າງ ຖືວ່າໄດ້ມີບໍລິສັດຈົດທະບຽນ ແລະ ສົ່ງອອກຜ່ານລະບົບໂກຕາແລ້ວ, ໃນຂະນະທີ່ ມັນຕົ້ນ, ສາລີ, ສັດລ້ຽງຍັງບໍ່ມີບໍລິສັດຈົດທະບຽນເພື່ອສົ່ງອອກ.

ປະສິດທິພາບດ້ານຜົນປະໂຫຍດຈາກການໃຫ້ໂກຕານີ້, ຕ້ອງໄດ້ຊ່ວຍຊາວກະສິກອນ ຂອງ ສປປ ລາວ ໃຫ້ສາມາດຍົກສູງ ແລະ ຮັກສາວິທີປະຕິບັດທາງກະສິກຳທີ່ເປັນມາດຕະຖານ ຢູ່ໃນຟາມ ແລະ ໃນການບໍລິຫານຈັດການຫຼັງການເກັບກູ້.

269. **ມີຄວາມຈຳເປັນ ທີ່ຕ້ອງມີການສົ່ງເສີມກະສິກຳຢ່າງມີຄຸນນະພາບສູງ.** ມີຄວາມຕ້ອງການນັບມື້ເພີ່ມຂຶ້ນເພື່ອໃຫ້ມີການສົ່ງເສີມກະສິກຳຢ່າງມີຄຸນນະພາບສູງ. MAF ໄດ້ສ້າງຕັ້ງກົມສົ່ງເສີມເຕັກນິກ ແລະ ປຸງແຕ່ງກະສິກຳໃນປີ 2018, ແຕ່ການຂາດຜູ້ຊ່ຽວຊານສະເພາະດ້ານ ແລະ ທຶນຮອນໄດ້ຈຳກັດຄວາມສາມາດໃນການສະໜອງການບໍລິການທີ່ຈຳເປັນ. ລັດຖະບານຈຳເປັນຕ້ອງໃຫ້ບູລິມະສິດໃນການເພີ່ມທະວີການລົງ ທຶນໃນການສົ່ງເສີມກະສິກຳແນໃສ່ໃຫ້ມີຜູ້ຊ່ຽວຊານສະເພາະດ້ານຂອງກະສິກຳ ເພື່ອຊ່ວຍຍົກສູງຄວາມຮູ້ ແລະ ທັກສະຂອງຊາວກະສິກອນ, ເພື່ອປັບປຸງຄຸນນະພາບຜົນຜະລິດຂອງການປູກຝັງການລ້ຽງສັດ ແລະ ຜະລິດຕະພາບ. ດ້ວຍການເພີ່ມທະວີການເຮັດສັນຍາຜູກພັນສອງສົ້ນ, ພາກສ່ວນເອກະຊົນກໍ່ອາດສາມາດເຮັດໜ້າທີ່ສົ່ງເສີມກະສິກຳຢ່າງມີຄຸນນະພາບສູງເຊັ່ນກັນ.

270. **ການຫຼຸດຜ່ອນການສູນເສຍຫຼັງການເກັບກ່ຽວແມ່ນມີຄວາມສຳຄັນຕໍ່ການເພີ່ມຄວາມສາມາດໃນການແຂ່ງຂັນ.** ຢູ່ຟາມ, ການສົ່ງເສີມກະສິກຳສາມາດຊ່ວຍຍົກສູງຄວາມຮູ້ ແລະ ທັກສະຂອງຊາວກະສິກອນໃນການເກັບກ່ຽວ/ເກັບກູ້, ການເກັບຮັກສາ ແລະ ການຫຸ້ມຫໍ່ເພື່ອການຂົນສົ່ງ. ເພື່ອຊຸກຍູ້ໃຫ້ຊາວກະສິກອນຍົກສູງມາດຕະຖານ, ຈຳເປັນຕ້ອງໄດ້ຍົກສູງມາດຕະຖານຄວາມປອດໄພດ້ານສະບຽງອາຫານ ແລະ ການບັງ ຄັບໃຊ້ລະບຽບການດ້ານຄວາມປອດໄພຂອງອາຫານຢູ່ຂັ້ນຟາມ. ການປັບປຸງໃນລະດັບການຂົນສົ່ງ / ການຂາຍຍົກຕ້ອງການ ທັງການອຳນວຍຄວາມສະດວກໃນການລົງທຶນຂອງເອກະຊົນໃນການຂົນສົ່ງທີ່ດີຂຶ້ນ ແລະ ລະບົບສາງເຢັນເພື່ອການເກັບຮັກສາ ແລະ ການລົງທຶນຂອງລັດໃນການປັບປຸງພື້ນຖານໂຄງລ່າງຖະໜົນຫົນທາງ. ໃນລະດັບການຂາຍຍ່ອຍ, ການຍົກສູງມາດຕະຖານຄວາມປອດໄພຂອງອາຫານ, ມາດ ຕະຖານຄວາມປອດໄພດ້ານອັກຄີໄພ ແລະ ຄວາມປອດໄພສາທາລະນະອື່ນໆ ແລະ ການບັງຄັບໃຊ້ຂອງສິ່ງດັ່ງກາວ ພ້ອມກັບການອຳນວຍຄວາມສະດວກໃນການລົງທຶນໃນການປັບປຸງພື້ນຖານໂຄງສ້າງ ດ້ານຕະຫຼາດເພື່ອໃຫ້ຕອບສະໜອງໄດ້ກັບມາດຕະຖານຄວາມປອດໄພໃໝ່ທີ່ສູງຂຶ້ນ ແມ່ນເປັນເລື່ອງຈຳເປັນ. ຢູ່ຕະຫຼາດສົດ, ເຊິ່ງເປັນບ່ອນທີ່ຮ້ານຂາຍຍ່ອຍຂະໜາດນ້ອຍຈຳນວນຫຼາຍເປັນຜູ້ຂາຍຜັກ, ຄົງຈະບໍ່ເໝາະສົມໃນທາງປະຕິບັດທີ່ຈະໃຫ້ແຕ່ລະຄົນຕ້ອງມີຕູ້ເຢັນ. ຢ່າງໃດກໍ່ຕາມ, ການປັບປຸງການລະບາຍອາກາດເພື່ອຫຼຸດຜ່ອນຄວາມຮ້ອນແລະປັບປຸງການໄຫຼວຽນຂອງອາກາດແລະການລະບາຍນ້ຳ ທີ່ຮ້ານຂາຍຍ່ອຍໄດ້ສົດຝົນໃສ່ສິນຄ້າຂອງພວກເຂົາໂດຍຜ່ານການປັບປຸງຫຼືການອອກແບບໃໝ່ສາມາດຊ່ວຍຍືດອາຍຸການເກັບຮັກສາຜັກ.

### 6.3.3 ກາເຟ

271. **ກາເຟແມ່ນໜຶ່ງໃນຜະລິດຕະພັນກະສິກຳທີ່ສຳຄັນຂອງ ສປປ ລາວ.** ໃນປີທີ່ມີຜົນຜະລິດດີ ສປປ ລາວ ສົ່ງອອກກາເຟທັງໝົດປະມານ 100 ລ້ານໂດລາສະຫະລັດ. ມັນແມ່ນໜຶ່ງໃນຫ້າຜະລິດຕະພັນສິນຄ້າກະສິກຳສົ່ງອອກລະດັບສູງສຸດ ຂອງປະເທດ ແລະເປັນຕົວທີ່ສ້າງລາຍຮັບເງິນຕາຕ່າງປະເທດທີ່ສຳຄັນ[41]. ຂະແໜງການໄດ້ຈ້າງງານບັນດາຄົວເຮືອນຈຳນວນຫຼວງຫຼາຍເພື່ອດຳເນີນການປູກກາເຟແບບຂະໜາດນ້ອຍ, ສະໜອງວຽກເຮັດງານທຳໃຫ້ຢູ່ຟາມ ແລະການປຸງແຕ່ງກາເຟທີ່ມີມູນຄ່າເພີ່ມ. ໃນຂະນະທີ່ກາເຟທີ່ປູກຢູ່ໃນ ສປປ ລາວ ສ່ວນຫລາຍແມ່ນສົ່ງອອກ, ໃນຮູບແບບຂອງກາເຟໝາກດິບ, ການຂາຍຢູ່ພາຍໃນໆບໍ່ດົນມານີ້ໄດ້ມີການຂະຫຍາຍຕົວດ້ວຍຍີ່ຫໍ້ກາເຟທ້ອງຖິ່ນ ແລະ ການມີຮ້ານກາເຟນັບມື້ນັບເພີ່ມຂຶ້ນ.

272. **ການຜະລິດກາເຟຂອງລາວໄດ້ຂະຫຍາຍຕົວຢ່າງໃຫຍ່ຫຼວງໃນທົດສະວັດທີ່ຜ່ານມາ, ໂດຍມີສວນປູກກາເຟເປັນສິນຄ້າເປັນສິ່ງຊຸກຍູ້ໃຫ້ຜະລິດຕະພາບມີຄວາມກ້າວໜ້າ.** ໃນປີ 2009-18, ການຜະລິດໄດ້ເພີ່ມຂຶ້ນຫຼາຍກວ່າສາມເທົ່າ, ອັດຕາການຂະຫຍາຍຕົວສະເລ່ຍຕໍ່ປີແມ່ນ 26,5 ສ່ວນຮ້ອຍ, ຈາກ 46.035 ໂຕນໃນປີ 2009 ເປັນ 155.970 ໂຕນຂອງໝາກກາເຟດິບໃນປີ 2018. ການຂະຫຍາຍຕົວຢ່າງໄວວານີ້ແມ່ນຜົນລວມມາຈາກການຂະຫຍາຍເນື້ອທີ່ດິນສະເລ່ຍ 6,3 ສ່ວນຮ້ອຍ ແລະການປັບປຸງຜະລິດຕະພາບ ຈາກ 12,9 ສ່ວນຮ້ອຍຕໍ່ປີ, ດັ່ງທີ່ສະແດງຢູ່ໃນຮູບ 6.4. ສະມັດຖະພາບສະເລ່ຍໄດ້ເພີ່ມຂຶ້ນເກືອບ 2 ເທົ່າຈາກຕ່ຳກວ່າໜຶ່ງໂຕນຕໍ່ເຮັກຕາກ່ອນປີ 2010 ມາເປັນເກືອບ 2 ໂຕນຕໍ່ເຮັກຕາໃນປີ 2018; ການເພີ່ມຂຶ້ນນີ້ແມ່ນເປັນຜົນມາຈາກການມີສວນປູກຂະໜາດໃຫຍ່ເພື່ອໃຫ້ເປັນສິນຄ້າ, ເຊິ່ງບັນລຸໄດ້ລະຫວ່າງ 3 ຫາ 5 ໂຕນຕໍ່ເຮັກຕາ. ຟາມກາເຟຂະໜາດນ້ອຍສະເລ່ຍໜຶ່ງໂຕນ ຫຼືໜ້ອຍກວ່າຕໍ່ເຮັກຕາ.

273. **ການຂະຫຍາຍຕົວທີ່ຜ່ານມາ ແມ່ນການຜະລິດກາເຟອາຣາບີກາກວມເອົາສ່ວນໃຫຍ່.** ການຂະຫຍາຍຕົວ ຂອງຜົນຜະລິດທີ່ຜ່ານມາສ່ວນໃຫຍ່ ແມ່ນຜົນມາຈາກການປູກທີ່ເພີ່ມຂຶ້ນ ຂອງກາເຟພັນອາຣາບີກາກາຕິມໍ ທີ່ທົນທານຕໍ່ພະຍາດ ໂດຍມີການເຂົ້າມາລົງທຶນໃໝ່ ແລະ ການທົດແທນແນວພັນໂຮບຸດສະຕາເກົ່າ, ເຊິ່ງສອດຄ່ອງກັບແຜນການຂອງ GOL ທີ່ຈະເພີ່ມການຜະລິດກາເຟອາຣາບີກາ ເປັນ 50 ສ່ວນຮ້ອຍຂອງຈຳນວນທັງໝົດ. ໃນຕົ້ນຊຸມປີ 2000, ໃນເວລາທີ່ການຜະລິດກາເຟເກືອບທັງໝົດໄດ້ສຸມໃສ່ຢູ່ໃນພູພຽງບໍລະເວນ, ບ່ອນທີ່ດິນ, ຄວາມສູງ ແລະ ສະພາບອາກາດມີຄວາມເໝາະສົມທີ່ສຸດສຳລັບແນວພັນກາເຟອາຣາບີກາທີ່ມີຄຸນນະພາບລະດັບສູງ, ກາເຟໂຣບຸດສະຕາ ກວມເອົາປະມານ 90 ສ່ວນຮ້ອຍຂອງການຜະລິດກາເຟຂອງປະເທດ (Winston, E., ຄະນະຊ່ຽວຊານ, 2005). ການຜະລິດກາເຟອາຣາບີກາໄດ້ຂະຫຍາຍຕົວຂຶ້ນພາຍຫຼັງທີ່ FAO ໄດ້ນຳເອົາກາເຟອາຣາບີກາກາຕິມໍມາປູກ ໃນປີ 2004, ເຊິ່ງເປັນພັນທີ່ມີຄວາມທົນທານຕໍ່ພະຍາດຫຼາຍກວ່າ. ແນວໃດກໍ່ຕາມ, ເຖິງວ່າຕົ້ນກາເຟອາຣາບີກາກາຕິມໍ ຈະໃຫ້ຜົນຜະລິດສູງກວ່າ, ຂາຍໃນລາຄາທີ່ສູງກວ່າ ແລະ ມີຄວາມສ່ຽງຕໍ່ການຖືກພະຍາດທຳລາຍໜ້ອຍລົງ, ແຕ່ຊາວສວນກາເຟຂະໜາດນ້ອຍຫຼາຍ

41. ຜະລິດຕະພັນສິນຄ້າ ກະສິກຳສົ່ງອອກອັນດັບໜຶ່ງອີກ 5 ປະເພດຂອງ ສປປ ລາວ ລວມມີ ຢາງພາລາ, ມັນຕົ້ນ, ສາລີ, ແລະ ໝາກກ້ວຍ.

ຄືນຍັງສືບຕໍ່ປູກແນວພັນໂຮບຸດສະຕາ ເນື່ອງຈາກວ່າມັນຕ້ອງການປັດໄຈແຮງງານ ແລະ ຝຸ່ນໜ້ອຍກວ່າ ແລະ ທົນທານຕໍ່ພະຍາດກວ່າ.

## ຮູບທີ 6.4 ການຜະລິດກາເຟໃນ ສປປ ລາວ: 2009-2018




Data source: https://laosis.lsb.gov.la/ (accessed 1 September 2020).

*ໝາຍເຫດ: ທ່ອນສີຟ້າແມ່ນຜົນຜະລິດ, ທ່ອນສີສົ້ມແມ່ນເນື້ອທີ່ເກັບກູ້, ເສັ້ນສີເທົາແມ່ນສະມັດຖະພາບ. ຈໍ້າເມັດໃນຕົວເລກແມ່ນຈຸດເລກເສດສ່ວນ.*

274. **ການຜະລິດກາເຟແມ່ນແຫຼ່ງລາຍໄດ້ທີ່ສຳຄັນ ສຳລັບຊາວສວນຂະໜາດນ້ອຍ ແລະ ໄດ້ດຶງດູດ FDI.** ໃນທົດສະວັດທີ່ຜ່ານມາ, ຄຽງຄູ່ກັບເນື້ອທີ່ເກັບກູ້ທີ່ເພີ່ມຂຶ້ນຫຼາຍ ຂອງບັນດາສວນປູກກາເຟຂະ ໜາດໃຫຍ່ທີ່ເປັນການລົງທຶນຈາກຕ່າງປະເທດ, ແຕ່ຊາວສວນກາເຟຂະໜາດນ້ອຍຈຳນວນຫຼາຍໃນພາກໃຕ້ ແລະພາກເໜືອກໍ່ຍັງໄດ້ເຂົ້າໄປດຳເນີນການໃນຂະແໜງການນີ້ເຊັ່ນກັນ. ກາເຟສ່ວນຫຼາຍແມ່ນປູກຢູ່ພາກໃຕ້ ແລະ ມີການກະຈຸກຕົວສູງຢູ່ໃນພູພຽງບໍລະເວນຈາກລະດັບຄວາມສູງຈາກໜ້ານ້ຳທະເລ 300 ແມັດ ຫາ 1.300 ແມັດ ເຊິ່ງເປັນບ່ອນທີ່ມີດິນພູໄຟ, ຄວາມຊຸ່ມຊື່ນຈາກທຳມະຊາດ, ແສງແດດ ແລະ ອຸນຫະພູມທີ່ເອື້ອອຳນວຍໃຫ້ແກ່ການປູກກາເຟທີ່ມີຄຸນນະພາບ. ໃນໄລຍະ 2014-18, ຫຼາຍກວ່າ 95 ສ່ວນຮ້ອຍຂອງການຜະລິດສະເລ່ຍປະຈຳປີຂອງປະເທດແມ່ນມາຈາກພູພຽງບໍລະເວນ. ຕາຕະລາງ 6.5 ສະແດງໃຫ້ເຫັນການຜະລິດກາເຟແຕ່ລະເມືອງ. ຫວ່າງມໍ່ໆມານີ້, ການຜະລິດກາເຟໄດ້ແຜ່ຂະຫຍາຍໄປສູ່ບັນດາແຂວງໃນເຂດພູດອຍພາກເໜືອ, ໂດຍສະເພາະແຂວງຫຼວງພະບາງ, ອຸດົມໄຊ ແລະ ຜົ້ງສາລີ.

275. **ການຜະລິດກາເຟຢູ່ພາກເໜືອທີ່ພົ້ນເດັ່ນຂຶ້ນ.** ການຜະລິດກາເຟໃນ ສປປ ລາວ ໃນທົດສະວັດທີ່ຜ່ານມາ ໄດ້ຄ່ອຍໆແຜ່ກະຈາຍໄປທາງທິດເໜືອ ໃນຂະນະທີ່ການຜະລິດກາເຟທີ່ເປັນມູນເຊື້ອຂອງພາກໃຕ້ກໍ່ມີການຂະຫຍາຍຕົວເຊັ່ນດຽວກັນ. ຕາຕະລາງ 6.5 ໃຫ້ລາຍລະອຽດກ່ຽວກັບການປ່ຽນແປງໃນການຜະລິດກາເຟຢູ່ ສປປ ລາວ ໃນໄລຍະປີ 2009-18. ໄດ້ມີການລາຍງານເປັນຕົວເລກ ບົນພື້ນຖານການສະເລ່ຍໃນຫ້າປີເພື່ອໃຫ້ເຫັນແຈ້ງການປ່ຽນແປງທີ່ຖາວອນໃນຂະແໜງການ, ເນື່ອງຈາກວ່າຂໍ້ມູນກະສິກຳປະຈຳປີສາມາດໄດ້ຮັບອິດທິພົນຈາກການເໜັງຕີງຕາມລະດູການຂຶ້ນກັບລາຄາ, ສະພາບອາກາດ, ສັດຕູພືດ ແລະ ພະຍາດ. ແຂວງທີ່ມີການຜະລິດທີ່ສຳຄັນໃນພາກເໜືອແມ່ນຫຼວງພະບາງ ແລະ ຜົ້ງສາລີ. ໃນລະຫວ່າງປີ 2012 ຫາ 2018, ເນື້ອທີ່ປູກໃນພາກເໜືອໄດ້ເພີ່ມຂຶ້ນຫຼາຍເທົ່າ, ຈາກ 610 ເຮັກຕາໃນປີ 2012 ເປັນ 4.360 ເຮັກຕາໃນປີ 2018. ເຖິງວ່າສະມັດຖະພາບການຜະລິດໃນພາກເໜືອເວົ້າລວມແມ່ນຂ້ອນຂ້າງຕ່ຳ, ແຕ່ຄາດວ່າຜົນຜະລິດຍັງຈະເພີ່ມຂຶ້ນຕື່ມອີກ ເນື່ອງຈາກຕົ້ນກາເຟອ່ອນ, ເຊິ່ງປູກແຕ່ປີ 2015 ແລະ ຕໍ່ໆມາ, ຈະກາຍເປັນຕົ້ນແກ່ ແລະ ຍ້ອນຕົ້ນກາເຟໄດ້ຟື້ນຕົວຈາກຜົນກະທົບຂອງສະພາບອາກາດ. ຢູ່ພາກໃຕ້, ເນື້ອທີ່ປູກໄດ້ເພີ່ມຂຶ້ນ 13% ທຽບໃສ່ໄລຍະດຽວກັນ, ຈາກ 78.000 ເຮັກຕາໃນປີ 2012. ແຂວງຊຽງຂວາງ ເປັນແຂວງດຽວໃນພາກກາງ ທີ່ຜະລິດກາເຟເປັນສິນຄ້າໃນຈຳນວນທີ່ເຫັນວ່າພົ້ນເດັ່ນ. ແຂວງນີ້ຂ້ອນຂ້າງວ່າເປັນນ້ອງໃໝ່. ໃນໄລຍະ 2009-18, ທັງໆທີ່ສ່ວນແບ່ງຂອງຜົນຜະລິດແມ່ນໜ້ອຍກວ່າເຄິ່ງໜຶ່ງຂອງຜົນຜະລິດລວມຂອງປະເທດ ແລະ ກໍ່ໄດ້ຫຼຸດລົງ, ການຜະລິດປະຈຳປີໄດ້ເພີ່ມຂຶ້ນຈາກ ຄ່າສະເລ່ຍຕໍ່ປີໃນໄລຍະ 5 ປີ ຄື 270 ໂຕນໃນໄລຍະ 2009-13 ມາເປັນ 498 ໂຕນໃນໄລຍະ 2014 - 18. ການເພີ່ມຂຶ້ນນີ້ແມ່ນພຽງເປັນຜົນມາຈາກການປູກທີ່ເພີ່ມຂຶ້ນ, ຈາກ 240 ເຮັກຕາໃນປີ 2013 ເປັນ 845 ເຮັກຕາໃນປີ 2018, ເນື່ອງຈາກວ່າສະມັດຖະພາບການຜະລິດໄດ້ຫຼຸດລົງຈາກ 2 ໂຕນ/ເຮັກຕາຕໍ່ປີໃນໄລຍະ 2009-13 ເປັນ 1,33 ໂຕນ/ເຮັກຕາຕໍ່ປີໃນໄລຍະ 2014-18. ການຫຼຸດລົງຂອງສະມັດຖະພາບການຜະລິດຂອງແຂວງຊຽງຂວາງແມ່ນຜົນລວມຈາກສະພາບອາກາດທີ່ບໍ່ດີ (ນ້ຳໝອກກ້າມ) ແລະ ການບໍ່ມີຜູ້ຊື້, ເຮັດໃຫ້ຊາວສວນປະຖິ້ມການປູກກາເຟຂອງຕົນ, ດັ່ງທີ່ລະບຸໄວ້ໃນການສຶກສາຂອງ Valadone (2016).

## ຕາຕະລາງ 6.3 ບັນດາແຂວງທີ່ຜະລິດກາເຟໃນ ສປປ ລາວ 2009-2018

| ພາກ ແລະ ແຂວງ | ຜົນຜະລິດ (ເປັນ ໂຕນ)* | | | % ໃນຜົນຜະລິດແຫ່ງຊາດ | | ສະມັດຖະພາບ (ໂຕນ/ຮຕ) | | |
|---|---|---|---|---|---|---|---|---|
| | 2009-13 | 2014-18 | % ການປ່ຽນແປງ | 2009-13 | 2014-18 | 2009-13 | 2014-18 | % ການປ່ຽນແປງ |
| ລວມຂອງປະເທດ | 64.091 | 138.574 | 116,21 | 100,00 | 100,00 | 1,25 | 1,73 | 38,71 |
| ພາກເໜືອ | 448 | 4.431 | 889.06 | 0,70 | 3,20 | 1,92 | 1,76 | -8,25 |
| ຜົ້ງສາລີ | 13 | 977 | 7.415,38 | 0,02 | 0,71 | 0,87 | 1,66 | 91,15 |
| ອຸດົມໄຊ | 300 | 720 | 140,00 | 0,47 | 0,52 | 2,00 | 1,94 | -3,36 |
| ຫລວງພະບາງ | 244 | 2.628 | 978,15 | 0,38 | 1,90 | 2,21 | 1,87 | -15,33 |
| ພາກກາງ | 270 | 498 | 84,44 | 0,42 | 0,36 | 2,04 | 1,33 | -34,88 |
| ຊຽງຂວາງ | 270 | 498 | 84,44 | 0,42 | 0,36 | 2,04 | 1,33 | -34,88 |
| ພາກໃຕ້ | 63.427 | 133.645 | 110,71 | 98,96 | 96,44 | 1,24 | 1,73 | 39,53 |
| ສາລະວັນ | 20.529 | 20.183 | (1,69) | 32,03 | 14,56 | 2,41 | 1,04 | -56,99 |
| ເຊກອງ | 8.901 | 36.954 | 315,17 | 13,89 | 26,67 | 1,42 | 3,30 | 132,60 |
| ຈຳປາສັກ | 33.455 | 70.121 | 109,60 | 52,20 | 50,60 | 1,11 | 1,54 | 39,45 |
| ອັດຕະປື | 678 | 1.212 | 78,89 | 1,06 | 0,87 | 1,20 | 1,09 | -8,64 |

**ທັງໝົດ ຄິດໄລ່ເປັນຄ່າສະເລ່ຍຂອງປີ. ແຫລ່ງຂໍ້ມູນ: https://laosis.lsb.gov.la/ (ເຂົ້າເບິ່ງຄັ້ງວັນທີ 01/09/20)*

276. **ການຈຳໜ່າຍ ແລະ ການເພີ່ມມູນຄ່າ: ກາເຟທີ່ປູກຢູ່ໃນ ສປປ ລາວ ສ່ວນໃຫຍ່ແມ່ນໄດ້ສົ່ງອອກ ແລະ ກາເຟເປັນສິນຄ້າກະສິກຳທີ່ສຳຄັນອັນໜຶ່ງທີ່ສ້າງລາຍໄດ້ເປັນເງິນຕາຕ່າງປະເທດ.** ການສົ່ງອອກກາເຟປະຈຳປີມີມູນຄ່າປະມານ 100 ລ້ານໂດລາ, ການຂຶ້ນລົງຂອງມູນຄ່າມາຈາກຫຼາຍປັດໄຈລວມທັງການເໜັງຕີງຂອງລາຄາຕະຫລາດໂລກ ແລະ ເງື່ອນໄຂການປູກ ເຊັ່ນ: ສັດຕູພືດ, ພະຍາດ ແລະ ສະພາບອາກາດ. ຫວ່າງມໍ່ໆມານີ້, ກາເຟຂອງ ສປປ ລາວ ໄດ້ສົ່ງອອກໄປຫວຽດນາມ ຫຼາຍຂຶ້ນ ໂດຍສະເພາະເມັດກາເຟອາຣາບີກາ, ໂດຍທົ່ວໄປແລ້ວແມ່ນປະມານເຄິ່ງໜຶ່ງຂອງການຜະລິດອາຣາບີກາທັງໝົດ ຂອງ ສປປ ລາວ. ໃນໄລຍະ 5 ເດືອນຕົ້ນປີ 2020, ສປປ ລາວ ໄດ້ສົ່ງອອກກາເຟໝາກດິບ(ຂຽວ) ເກືອບ 20 ໂຕນ ມູນຄ່າ 37 ລ້ານໂດລາ ແລະ 65% ຂອງການສົ່ງອອກທັງໝົດແມ່ນສົ່ງໄປຫວຽດນາມ, ອີງຕາມຂໍ້ມູນຈາກສະມາຄົມກາເຟລາວ.[42] ຕະຫຼາດສົ່ງອອກອື່ນໆລວມມີປະເທດໄທ, ຍີ່ປຸ່ນ, ກຳປູເຈຍ, ເອີຣົບ (ຝຣັ່ງ, ເຢຍລະມັນ, ອື່ນໆຫຼາຍປະເທດ) ແລະ ສະຫະລັດ.

277. **ໃນປີ 2015 ເປັນຄັ້ງທຳອິດທີ່ລາຄາສົ່ງອອກກາເຟຂອງ ສປປ ລາວ ໄດ້ເພີ່ມຂຶ້ນສູງກວ່າລາຄາລວມຂອງຕະຫລາດສາກົນແບບສະເລຍຖ່ວງນ້ຳໜັກ.** ການເພີ່ມຂຶ້ນຂອງລາຄາສົ່ງອອກກາເຟຂອງລາວໃນໄລຍະປີ 2008 - 18 ແມ່ນເຫັນໄດ້ຊັດເຈນ, ດັ່ງທີ່ສະແດງຢູ່ໃນຮູບ 6.5. ນັບຕັ້ງແຕ່ປີ 2011 ເປັນຕົ້ນມາ, ລາຄາສົ່ງອອກກາເຟລາວສະເລ່ຍບໍ່ໄດ້ຫຼຸດລົງຕໍ່າກວ່າລະດັບລາຄາປີ 2008 (2.053 ໂດລາ/ໂຕນ), ໃນຂະນະທີ່ລາຄາສະເລຍລວມຂອງອົງການກາແຟສາກົນ (ICO) ໃນປີ 2018 ແມ່ນຢູ່ໃນລະດັບຂອງປີ 2008[43]. ໃນປີ 2015, ລາຄາສົ່ງອອກຂອງລາວໄດ້ເພີ່ມຂຶ້ນສູງກວ່າລາຄາສະເລຍລວມຂອງສາກົນເປັນຄັ້ງທຳອິດ, ເມື່ອລາຄາສົ່ງອອກສະເລ່ຍ ຂອງກາເຟຂອງລາວ ຢູ່ທີ່ 3.338 ໂດລາ/ໂຕນ ໃນເວລາດຽວກັນລາຄາສະເລ່ຍລວມຂອງສາກົນຢູ່ທີ່ 2.749 ໂດລາ/ໂຕນ. ກ່ອນປີ 2015, ລາຄາສົ່ງອອກກາເຟຂອງລາວມີການເໜັງຕີງຂຶ້ນລົງຢ່າງຕໍ່ເນື່ອງເຊິ່ງຕາມມາຈາກລາຄາສະເລ່ຍ ລວມຂອງ ICO ທີ່ຢູ່ໃນລະດັບຕໍ່າ. ຫຼັງຈາກການຫຼຸດລົງເລັກນ້ອຍໃນປີ 2016, ລາຄາກາເຟລາວເພີ່ມຂຶ້ນໃນປີ 2017 ເກີນລາຄາສະເລຍລວມຂອງ ICO.

278. **ການເພີ່ມຂຶ້ນຂອງລາຄາກາເຟຂອງ ສປປ ລາວ ໃນຕະຫຼາດສາກົນສະທ້ອນໃຫ້ເຫັນເຖິງຜົນສຳເລັດຂອງຂະແໜງການຕ່າງໆໃນການພັດທະນາກາເຟຊະນິດພິເສດ ແລະ ປອດສານພິດ.** ໂດຍສະເພາະ ມັນແມ່ນຜົນໂດຍກົງ ຂອງແນວພັນອາຣາບີກາທີ່ເພີ່ມຂຶ້ນ ໃນບໍລິບົດຂອງການສົ່ງອອກກາເຟ ຂອງລາວ (ເບິ່ງຮູບ 6.5). ຄວາມສຳເລັດແມ່ນມາຈາກແນວພັນອາຣາບີກາ ເຊິ່ງປົກກະຕິແມ່ນມີລາຄາສູງກວ່າ ໂຣບຸດສະຕາຢູ່ແລ້ວ, ບວກກັບການປັບປຸງການແຍກປະເພດຄຸນນະພາບເມັດ ແລະ ການຄັດເລືອກເມັດກາເຟເພື່ອສົ່ງອອກ ແລະ ການຜະລິດກາເຟອິນຊີທີ່ເພີ່ມຂຶ້ນ.

---

42. ສະມາຄົມກາເຟລາວ (ມິຖຸນາ 2020).

43. ລາຄາສະເລຍລວມທີ່ອົງການກາແຟສາກົນ (ICO) ໄດ້ລາຍງານ, ແມ່ນລາຄາທີ່ໃຊ້ເປັນຕົວຊີ້ວັດທີ່ໄດ້ຈາກບັນດາລາຄາສະເລ່ຍຖ່ວງນ້ຳໜັກ ຂອງກາເຟໂກລົມເບຍລົດຊາດອ່ອນ, ກາເຟຊະນິດບໍ່ປຸກອື່ນໆ, ກາເຟບເຣຊິນທຳມະຊາດ ແລະ ກາເຟສາຍພັນໂຣບຸດສະຕາ ຂອງຕະຫລາດ EU ແລະ ສະຫະລັດອະເມລິກາ. ນ້ຳໜັກຂອງແຕ່ລະລາຄາເພື່ອໃຊ້ຖ່ວງນັ້ນ, ອົງການ ICO ເປັນຜູ້ປະກາດໃຫ້ທັນກັບສະພາບເປັນໄລຍະໆ ແລະ ທັງເປັນຜູ້ລາຍງານພ້ອມ. ຈົ່ງເບິ່ງ www.ICO.org.

## ກ່ອງເນື້ອຄວາມ 6.2 ຜູ້ປູກກາເຟຊະນິດພິເສດ

> ໃນປີ 2018, ສະຫະກອນຊາວສວນກາເຟເຈໄທ (JCFC) ມີສະມາຊິກ 450 ຄົນໃນ 21 ບ້ານຢູ່ພູພຽງບໍລະເວນ, ໃນນັ້ນ250 ຄົນແມ່ນຜູ້ທີ່ກຳລັງຜະລິດກາເຟພິເສດປອດສານພິດ, ດ້ວຍເນື້ອທີ່ການຜະລິດທັງໝົດ 1.500 ເຮັກຕາ. (JCFC) ໄດ້ຜະລິດກາເຟພິເສດປອດສານພິດ ເຊິ່ງຂາຍໃນລາຄາລະຫວ່າງ $4,69 - $5,86 ຕໍ່ກິໂລກະຣາມ (ຂຶ້ນກັບຄຸນນະພາບຂອງເມັດກາເຟ), ໄປຕະຫຼາດຫຼັກໆໃນຍີ່ປຸ່ນ ແລະ ສະຫະລັດອາເມຣິກາ ລວມທັງຕະຫຼາດພາກພື້ນອື່ນໆ. JCFC ໃຊ້ລະບົບຄວາມໄວ້ວາງໃຈສຳລັບການຢັ້ງຢືນມາດຕະຖານອິນຊີ.
>
> ສະຫະກອນກາເຟອິນຊີທີ່ໂດດເດັ່ນອີກແຫ່ງໜຶ່ງ, ສະຫະກອນຜູ້ຜະລິດກາເຟພູພຽງບໍລະເວນ (CPC) ມີສະມາຊິກທັງໝົດ 1.093 ຄົນໃນ 55 ບ້ານ, ມີຜູ້ທີ່ກຳລັງຜະລິດກາເຟອິນຊີທັງໝົດ 824 ຄົນ. CPC ໃຊ້ການຢັ້ງຢືນມາດຕະຖານອິນຊີສາກົນຂອງພາກສ່ວນທີສາມ ແລະ ໄດ້ຮັບການສະໜັບສະໜູນຈາກອົງການຊ່ວຍເຫຼືອຂອງຝຣັ່ງ, AFD.
>
> *ແຫລ່ງຂໍ້ມູນ: ອົງການ UNCTAD, 2020.*

279. **ຍຸດທະສາດການພັດທະນາຂະແໜງກາເຟແຫ່ງຊາດຂອງ ສປປ ລາວ ໄດ້ຕັ້ງເປົ້າໝາຍການສ້າງມູນຄ່າຂອງກາເຟໃຫ້ສູງຂຶ້ນໂດຍຜ່ານການປັບປຸງຄຸນນະພາບເມັດກາເຟ, ສົ່ງເສີມການຜະລິດກາເຟອິນຊີ ແລະ ການພັດທະນາກາເຟພິເສດ.**[44] ຖ້າການພັດທະນາກາເຟພິເສດປະສົບຜົນສຳເລັດ, ການສ້າງມູນຄ່າທີ່ສູງຂຶ້ນເທົ່າໃດຂອງກາເຟພິເສດ ໂດຍປົກກະຕິອາດຈະສະທ້ອນເຖິງມູນຄ່າທີ່ສູງຂຶ້ນຂອງເມັດກາເຟຊຽວທີ່ຊື້ຂາຍ ແລະ ລາຄາສະເລ່ຍທີ່ບໍ່ຂຶ້ນກັບລາຄາກາເຟທີ່ເປັນສິນຄ້າຂັ້ນຕົ້ນສາກົນທີ່ ICO[45] ຕິດຕາມເປັນປົກກະຕິ.

## ຮູບທີ 6.5 ການສົ່ງອອກກາເຟດິບ ຂອງ ສປປ ລາວ ແລະ ລາຄາ: 2008–18




Data source: FAO STAT (accessed 1 Sep. 2020); ICO Composite, converted from price per pound as reported in www.ico.org (accessed 22 Oct. 2020).

*ໝາຍເຫດ: ທ່ອນສີຟ້າ ແມ່ນມູນຄ່າການສົ່ງອອກ, ເສັ້ນສີສົ້ມແມ່ນລາຄາສົ່ງອອກ ຂອງລາວ, ເສັ້ນສີເທົາແມ່ນຄ່າສະເລ່ຍລວມແບບຖ່ວງນໍ້າໜັກ ຂອງອົງການກາເຟສາກົນ ICO. ໃນບັນດາຕົວເລກ, ໝາຍຈຸດ ຄື ຈໍ້າ ຂອງຫົວໜ່ວຍພັນ.*

## ຮູບທີ 6.6 ໂຄງປະກອບການສົ່ງອອກທີ່ປ່ຽນແປງຂອງກາເຟລາວ: 2003–2019




*ໝາຍເຫດ: ເສັ້ນສີຟ້າແມ່ນກາເຟໂຣບຸດສະຕາ, ເສັ້ນສີສົ້ມແມ່ນກາເຟອາຣາບິກາ. ໃນບັນດາຕົວເລກ, ຈຸດ ໝາຍເຖິງ ຈໍ້າຂອງຫົວໜ່ວຍພັນ.*

280. **ກາເຟເກືອບທັງໝົດ ແມ່ນສົ່ງອອກເປັນເມັດດິບ ຫລື ຊຽວ, ແຕ່ມີໂອກາດທີ່ດີທີ່ຈະເພີ່ມການສົ່ງອອກເມັດກາເຟຂົ້ວທີ່ມີມູນຄ່າເພີ່ມ.** ຍີ່ຫໍ້ກາເຟລາວ ແບບຂົ້ວ ແລະ ກາເຟສໍາເລັດຮູບ ໄດ້ກາຍເປັນສິ່ງທີ່ເຫັນໄດ້ຫຼາຍຂຶ້ນໃນຕະຫຼາດພາຍໃນ. ຮ້ານກາເຟຂອງຍີ່ຫໍ້ທີ່ໄດ້ຮັບຄວາມນິຍົມໃນທ້ອງຖິ່ນກໍ່ເພີ່ມຂຶ້ນໃນດ້ານຈໍານວນ ແລະ ເຫັນວ່າພົ້ນເດັ່ນໃນທົດສະວັດທີ່ຜ່ານມາ, ຍ້ອນວ່າຜູ້ຂົ້ວກາເຟ ຢູ່ທ້ອງຖິ່ນ (ບາງບ່ອນກໍ່ແມ່ນການລົງທຶນຕ່າງປະເທດ) ໄດ້ພັດທະນາກາເຟພິເສດ ແລະ ຍີ່ຫໍ້ຂອງເຂົາເຈົ້າ; ຢ່າງໃດກໍ່ຕາມ, ອັນນີ້ ແມ່ນສໍາລັບຕະຫຼາດພາຍໃນເປັນສ່ວນໃຫຍ່. ຍີ່ຫໍ້ທີ່ມີຊື່ສຽງພາຍໃນປະເທດ ປະກອບດ້ວຍ ກາເຟດາວ, ກາເຟສິນຸກ, ກາເຟພູດອຍ, ກາເຟແຊຟຣອນ, ກາເຟແມ່ຕີ້, ກາເຟຄອມມາ, ກາເຟເລີຕຣິໂອ, ກາເຟເມືອງຊຽງ ແລະ ກາເຟຢູມີ. ປັດໄຈຕົ້ນຕໍທີ່ສ້າງເງື່ອນໄຂສະດວກແມ່ນຜູ້ບໍລິໂພກໃນຕົວເມືອງຂອງລາວ ແລະ ຈໍານວນນັກທ່ອງທ່ຽວທີ່ເຂົ້າມາທ່ຽວໃນປະເທດເພີ່ມຂຶ້ນ.

### ຂໍ້ຈໍາກັດ ແລະ ກາລະໂອກາດຂອງຕ່ອງໂສ້ມູນຄ່າກາເຟ

281. **ການປູກກາເຟຂອງຊາວສວນຂະໜາດນ້ອຍ ມີທ່າແຮງການຂະຫຍາຍຕົວສູງ.** ການປູກກາເຟຂອງຊາວສວນຂະໜາດນ້ອຍເປັນສ່ວນໜຶ່ງທີ່ສໍາຄັນຂອງອຸດສາຫະກໍາກາເຟຂອງລາວ; ແນວໃດກໍ່ຕາມ, ສະມັດ ຖະພາບແມ່ນຍັງຕໍ່າ ແລະ ຊາວສວນກໍ່ຍັງນໍາໃຊ້ໝາກກາເຟທີ່ມີເປືອກ ແລະ ເມັດກາເຟທີ່ມີຄຸນນະພາບຕໍ່າ ໃນອັດຕາທີ່ສູງ ຈຶ່ງເຮັດໃຫ້ລາຄາຂາຍໜ້າສວນຕໍ່າ. LCA (2020) ໄດ້ລາຍງານວ່າ ສວນປູກກາເຟ ຢູ່ພູພຽງບໍລະເວນ ໄດ້ມີແມງມາເຈາະທີ່ລໍາຕົ້ນ ແລະ ເຈາະເມັດໝາກກາເຟ ໃນເນື້ອທີ່ເຖິງ 30 ສ່ວນຮ້ອຍ.

282. **ຊາວສວນຂະໜາດນ້ອຍ ຜະເຊີນກັບຂໍ້ຈໍາກັດຫຼາຍຢ່າງໃນການປູກກາເຟທີ່ມີມູນຄ່າສູງ.** ຊາວສວນຂະໜາດນ້ອຍຫຼາຍຄົນເຂົ້າໃຈເຖິງຜົນປະໂຫຍດທາງດ້ານເສດຖະກິດ ແລະ ດ້ານສຸຂະພາບຂອງການປູກກາເຟອິນຊີ ແຕ່ບໍ່ສາມາດເຂົ້າສູ່ຕະຫຼາດຊອງວາງນີ້ໃນລະດັບສາກົນໄດ້. ກ່ອນອື່ນໝົດ, ການອອກໃບຢັ້ງ ຢືນກາເຟປອດສານພິດ ຂອງລາວບໍ່ໄດ້ຮັບການຍອມຮັບຈາກສາກົນ; ມັນເປັນພຽງການຮັບຮູ້ພາຍໃນປະ ເທດເທົ່ານັ້ນ. ດັ່ງນັ້ນ, ການຢັ້ງຢືນກາເຟອິນຊີ ຂອງລາວຈຶ່ງເປັນພຽງການຊ່ວຍໄດ້ແຕ່ສໍາລັບຈຸດປະສົງທາງການຕະຫຼາດພາຍໃນປະເທດເທົ່ານັ້ນ. ອັນທີສອງ, ການໄດ້ຮັບການຢັ້ງຢືນທາງດ້ານອິນຊີພາຍໃນປະເທດແມ່ນມີລາຄາແພງເກີນໄປສໍາລັບເຈົ້າຂອງສວນຂະໜາດນ້ອຍທີ່ປູກໃນສວນໃຜສວນມັນເປັນສ່ວນໃຫຍ່. ອັນທີສາມ, ຕ້ອງມີໃບຢັ້ງຢືນດ້ານກະສິກໍາອິນຊີຈາກພາກສ່ວນທີສາມ ເພື່ອຈະສາມາດຂາຍໄປຕ່າງປະເທດ, ເຊິ່ງເປັນການຂັດຂວາງຊາວສວນຂະໜາດນ້ອຍ. ຊາວສວນຂະໜາດນ້ອຍຈໍານວນໜ້ອຍດຽວທີ່ປະສົບຜົນສໍາເລັດໃນການສົ່ງອອກກາເຟປອດສານພິດແມ່ນໄດ້ເຂົ້າຮ່ວມກັບສະຫະກອນເພື່ອໃຫ້ໄດ້ຮັບການຢັ້ງຢືນ.

283. **ການຂົນສົ່ງກາເຟພາຍໃນ ສປປ ລາວ ຍັງສືບຕໍ່ມີການເກັບອາກອນ"ຊໍ້າຊ້ອນ".** ອາກອນກາເຟແມ່ນ ອໍານາດການປົກຄອງບ້ານເປັນຜູ້ເກັບ ເພື່ອຈະມອບຕໍ່ລາຍຮັບອາກອນທີ່ເກັບໄດ້ໃຫ້ອໍານາດການປົກ ຄອງເມືອງ. ມີການກໍານົດຈຸດກວດລົດເພື່ອໃຫ້ຜູ້ຂົນສົ່ງໄດ້ແຈ້ງໃບຮັບເງິນການຊໍາລະອາກອນກັບເຈົ້າໜ້າ ທີ່ ເພື່ອກວດຜ່ານກ່ອນອອກຈາກເຂດເມືອງ. ຖ້າຍັງບໍ່ທັນໄດ້ຈ່າຍອາກອນ, ກໍ່ແມ່ນຈ່າຍຢູ່ທີ່ນັ້ນ. ຢ່າງໃດກໍຕາມ, ລົດຂົນສົ່ງຍັງໄດ້ຖືກກວດໂດຍຕໍາຫຼວດຈະລາຈອນເຊິ່ງມີການຕັ້ງຈຸດກວດກາ "ຫຼາຍເກີນໄປ" ຕາມເສັ້ນທາງການຂົນສົ່ງ, ຕາມທີ່ໄດ້ເນັ້ນໜັກໃນບົດລາຍງານ ຂອງ LCA (2020). ຍັງມີການລາຍງານວ່າເຖິງວ່າໄດ້ມີໃບຮັບເງິນການເສຍອາກອນ, ກໍ່ຍັງມີການຮ້ອງຂໍຜູ້ຂົນສົ່ງໃຫ້ຈ່າຍ.

284. **ການປຸງແຕ່ງກາເຟ.** ປັດຈຸບັນ, ໂຮງສີກາເຟທີ່ບໍລິການຜູ້ຜະລິດຂະໜາດນ້ອຍແລະຜູ້ຜະລິດອິດສະ ຫລະອື່ນໆຍັງບໍ່ທັນມີເຄື່ອງຈຳແນກປະເພດເມັດກາເຟເພື່ອແຍກເມັດກາເຟທີ່ມີຄຸນນະພາບສູງອອກຈາກເມັດກາເຟຄຸນນະພາບຕ່ຳ. ມີພຽງແຕ່ຜູ້ປະກອບການສວນປູກຂະໜາດໃຫຍ່, ໂຮງງານປຸງແຕ່ງ/ຊາວຄ້າທີ່ມີເຄື່ອງຄັດເລືອກເມັດກາເຟ. ການເຮັດແບບນີ້ເຮັດໃຫ້ອຸດສາຫະກຳກາເຟ ສາມາດປັບປຸງຄຸນນະພາບຜະ ລິດຕະພັນສິນຄ້າສົ່ງອອກ ແລະ ໄດ້ຮັບລາຄາສົ່ງອອກທີ່ສູງຂຶ້ນ, ແຕ່ມັນພັດບໍ່ໄດ້ຊ່ວຍໃຫ້ຊາວສວນຂະໜາດນ້ອຍມີໂອກາດທີ່ຈະເປັນຕົວຂອງຕົວເອງຫລາຍຂຶ້ນ ແລະ ມີການພັດທະນາຍີ່ຫໍ້ກາເຟພິເສດຂອງຕົນເອງຂຶ້ນໄດ້ ໂດຍສະເພາະການສ້າງໃຫ້ມີລາຍໄດ້ເພີ່ມຈາກທາງເລືອກດຽວທີ່ມີຢູ່, ນັ້ນຄື, ຂາຍຜົນຜະລິດຂອງເຂົາເຈົ້າໃຫ້ຜູ້ປະກອບການທີ່ມີສວນຂະໜາດໃຫຍ່, ໂຮງງານປຸງແຕ່ງ, ຫຼືພໍ່ຄ້າຊາວຂາຍ.

285. **ສປປ ລາວ ຂາດການລະບຸທາງດ້ານພູມສາດ ທີ່ເປັນປະເທດຜະລິດກາເຟ ແລະ ການອອກໃບຢັ້ງຢືນແຫຼ່ງກຳເນີດກາເຟ.** ນີ້ແມ່ນຈຸດສຳຄັນຂອງການພັດທະນາກາເຟພິເສດ. ການລະບຸໃຫ້ປະເທດອື່ນກ່າວຂານເຖິງວ່າເປັນແຫລ່ງຜະລິດກາເຟ ພ້ອມດ້ວຍການມີໃບຢັ້ງຢືນແຫຼ່ງກຳເນີດແມ່ນມີຄວາມຈຳເປັນສຳລັບການບອກຄວາມແຕກຕ່າງຂອງເມັດກາເຟຄຸນນະພາບ, ທີ່ປູກໃນພື້ນທີ່ສະເພາະໃດໜຶ່ງ ເຊິ່ງມີດິນ ແລະ ສະພາບອາກາດທີ່ມີຄຸນສົມບັດໃນການຜະລິດເມັດກາເຟທີ່ເປັນເອກະລັກທີ່ປູກໃນພື້ນທີ່ນັ້ນ. ການແຍກປະເພດຄຸນນະພາບເມັດກາເຟ, ການກຳນົດພື້ນທີ່ແລະ ການອອກໃບຢັ້ງຢືນແຫລ່ງກຳເນີດແມ່ນຈຳເປັນສຳລັບການພັດທະນາກາເຟພິເສດ.

286. **ຕ້ອງການໃຫ້ມີການສະໜັບສະໜູນດ້ານວິຊາການ ແລະ ທາງດ້ານການເງິນເພີ່ມເຕີມເພື່ອສົ່ງ ເສີມການພັດທະນາຍີ່ຫໍ້.** ປັດຈຸບັນມີ 9 ຍີ່ຫໍ້ກາເຟຂອງລາວ ແລະ ຫຼາຍກວ່າເຄິ່ງໜຶ່ງແມ່ນນັກລົງທຶນຕ່າງ ປະເທດເປັນເຈົ້າຂອງ, ສ່ວນທີ່ຍັງເຫຼືອແມ່ນນັກລົງທຶນພາຍໃນຂອງລາວ. ມີໂອກາດທີ່ຈະສົ່ງເສີມຍີ່ຫໍ້ສຳລັບຕະຫລາດຊອງວ່າງໃຫມ່ໃຫ້ກັບຊາວສວນຂະໜາດນ້ອຍ, ຍ້ອນວ່າ ມີເງື່ອນໄຂທາງດ້ານເຕັກໂນໂລຊີ; ຟາມກາເຟໜຶ່ງເຮັກຕາເຖິງຈະແມ່ນຂະໜາດຈຸນລະພາກ ກໍ່ສາມາດສ້າງກຳໄລໄດ້ ຖ້າວ່າມີການຄຸ້ມຄອງທີ່ດີ. ການເພີ່ມຜະລິດຕະພາບໃນກຸ່ມຊາວສວນຂະໜາດນ້ອຍຮຽກຮ້ອງໃຫ້ມີການລົງທຶນເພີ່ມເຕີມໃນການສົ່ງເສີມກະສິກຳ (ພາກລັດ/ເອກະຊົນ), ພະນັກງານວິຊາການທີ່ໄດ້ຮັບການຝຶກອົບຮົມຢ່າງດີ (ຫ້ອງວິໄຈ) ແລະ ການຈັດຫາທຶນສຳລັບການລົງທຶນ. ຮູບແບບຕ່າງໆທີ່ມີຢູ່ແລ້ວຂອງບັນດາສະຫະກອນກາເຟອິນຊີພິເສດ (JCFC ແລະ CPC) ອາດສາມາດສຶກສາໄດ້ຕື່ມອີກ, ທັງສ້າງຄວາມເຂັ້ມແຂງ ແລະ ໃຫ້ມີການຂະຫຍາຍໄປສູ່ພາກພື້ນການຜະລິດກາເຟອື່ນໆທີ່ມີຄວາມສົນໃຈໃນການຜະລິດກາເຟອິນຊີ. ສະຫະກອນກະເສດສາ ມາດດຳເນີນການໂດຍມີການຮ່ວມມືກັບການສົ່ງເສີມກະສິກຳ. ອາດຈະພິຈາລະນາ ການສ້າງຕັ້ງສະມາຄົມກາເຟອິນຊີ. ນອກຈາກນັ້ນ, ການປັບປຸງການອອກໃບຢັ້ງຢືນກະສິກຳອິນຊີຢູ່ພາຍໃນປະເທດກໍ່ມີຄວາມຈຳເປັນ.

287. **ການເພີ່ມການຜະລິດກະສິກຳອິນຊີ ເພື່ອປັບປຸງມູນຄ່າ ແລະ ເພື່ອການທຳຕະຫຼາດ ເປັນແນວທາງທີ່ໄດ້ສະເໜີແນະໃນຍຸດທະສາດການພັດທະນາຂະແໜງກາເຟລາວ ຮອດປີ 2025.** ສິ່ງນີ້ຖືວ່າເປັນວິທີການຜະລິດກະສິກຳແບບຍືນຍົງເຊິ່ງບໍ່ພຽງແຕ່ຈະສ້າງຜົນປະໂຫຍດທາງດ້ານເສດຖະກິດໃຫ້ແກ່ຜູ້ຜະລິດຂະ ໜາດນ້ອຍ ໂດຍຜ່ານການສ້າງມູນຄ່າເພີ່ມໄດ້ຕື່ມເທົ່ານັ້ນ, ແຕ່ຍັງເປັນຜົນປະໂຫຍດດ້ານສຸຂະພາບສຳລັບທັງຜູ້ຜະລິດ ແລະ ຜູ້ບໍລິໂພກ ແລະ ຜົນປະໂຫຍດດ້ານສິ່ງແວດລ້ອມເຊັ່ນດຽວກັນ.

288. **ການຂາດແຄນການບໍລິການແຍກປະເພດກາເຟຢູ່ໃນໂຮງງານສີກາເຟ ກໍ່ແມ່ນຂໍ້ຈຳກັດອັນໜຶ່ງ.** ການຂາດການບໍລິການຈຳແນກເມັດຢູ່ໂຮງງານສີກາເຟໄດ້ກີດກັນຊາວກະສິກອນຂະໜາດນ້ອຍຈາກການພັດທະນາຍີ່ຫໍ້ກາເຟພິເສດຂອງຕົນເອງແລະຂາຍຜະລິດຕະພັນຂອງເຂົາເຈົ້າໂດຍກົງກັບໃຫ້ຜູ້ບໍລິໂພກສຸດທ້າຍ. ອາດມີຄວາມຈຳເປັນພິຈາລະນານະໂຍບາຍສົ່ງເສີມເພື່ອຈະຊ່ວຍໜູນໃຫ້ໂຮງງານລົງທຶນໃສ່ເຄື່ອງຈຳແນກເມັດກາເຟ. ນອກເໜືອໄປຈາກເຄື່ອງຄັດເມັດກາເຟແລ້ວ, ການລະບຸຊື່ທາງດ້ານພູມສາດ ຂອງແຫຼ່ງຜະລິດ ແລະ ການອອກໃບຢັ້ງຢືນແຫຼ່ງກຳເນີດຍ່ອມເປັນຜົນດີຕໍ່ການພັດທະນາກາເຟພິເສດອີກດ້ວຍ.

289. **ໂຄງການສະໜັບສະໜູນການພັດທະນາຍີ່ຫໍ້ໃຫ້ແກ່ຈຸນລະວິສາຫະກິດ ແລະ ວິສາຫະກິດຂະໜາດນ້ອຍ ເພື່ອສົ່ງເສີມການເຕີບໂຕແບບທົ່ວເຖິງກວ່າເກົ່າໃນການພັດທະນາກາເຟພິເສດ.** ໂຄງການດັ່ງກ່າວອາດສາມາດສະໜັບສະໜູນຊາວກະສິກອນຂະໜາດນ້ອຍທີ່ມີຄຸນວຸດທິ, ຜູ້ທີ່ຕ້ອງການພັດທະນາກາເຟຍີ່ຫໍ້ສະເພາະເຈາະຈົງຂອງຕົນເອງ, ນັບທັງຜູ້ຊື້ກາເຟທີ່ໄດ້ເງື່ອນໄຂມາດຖານ (ເຊິ່ງບໍ່ຈຳເປັນຕ້ອງເປັນຊາວກະສິກອນ) ທີ່ສົນໃຈຢາກພັດທະນາຍີ່ຫໍ້ກາເຟສະເພາະຂອງຕົນເອງ. ສ່ວນປະກອບທີ່ສຳຄັນສຳລັບໂຄງ ການນີ້ປະກອບມີດ້ານວິຊາການ (ການປູກ, ການປຸງແຕ່ງຂັ້ນຕົ້ນ, ການຂົ້ວ, ການພັດທະນາຍີ່ຫໍ້ ແລະ ການຕະຫຼາດ) ແລະການຊ່ວຍເຫຼືອທາງດ້ານການເງິນໃນຮູບແບບຂອງເງິນກູ້ທາງການຄ້າ.

290. **ຂໍ້ຄວນພິຈາລະນາເພີ່ມເຕີມລວມ ມີຄວາມຫຍຸ້ງຍາກໃນການເຂົ້າເຖິງຂໍ້ມູນຂ່າວສານ ກ່ຽວກັບອາກອນສົ່ງອອກ, ການຂາດຄວາມໂປ່ງໃສ ແລະ ການຈັດຕັ້ງປະຕິບັດທີ່ບໍ່ສອດຄ່ອງກັນ ຂອງອາກອນສົ່ງອອກແລະອາກອນກຳໄລສຳລັບຜູ້ສົ່ງອອກ; ທັງໝົດແມ່ນເຮັດໃຫ້ເກີດຄວາມບໍ່ສະດວກ ແລະເພີ່ມຕົ້ນທຶນແບບສ້າງຂຶ້ນເອງໃຫ້ແກ່ຜູ້ສົ່ງອອກ.** ການນຳໃຊ້ຄູ່ມືແນະນຳການສົ່ງອອກ ແລະອັດຕາອາກອນຂອງ ສປປ ລາວ ທາງອອນລາຍແມ່ນມີຄວາມທ້າທາຍ, ແມ່ນແຕ່ຈາກ ສູນຂໍ້ມູນຂ່າວສານການຄ້າທີ່ເປັນເວັບໄຊທາງການລາວ, ເຊິ່ງອາດຈະເປັນແຫຼ່ງອອນລາຍຕົ້ນຕໍທີ່ສະດວກ ສຳລັບຜູ້ທີ່ມີທ່າແຮງສົ່ງອອກ ແລະ ນັກລົງທຶນທີ່ເນັ້ນການສົ່ງອອກ. ຮຽກຮ້ອງໃຫ້ມີການປັບໂປແກມຕໍ່ປະສານໃຫ້ເປັນປັດຈຸບັນ ແລະ ເປັນມິດກັບຜູ້ໃຊ້ຫຼາຍຂຶ້ນ. ຄວາມບໍ່ສາມາດເຂົ້າເຖິງຂໍ້ມູນນີ້ໄດ້ຢ່າງສະດວກວ່ອງໄວ ເປັນການເພີ່ມຕົ້ນທຶນສຳລັບຜູ້ທີ່ມີທ່າແຮງສົ່ງອອກຫຼືນັກລົງທຶນທີ່ສຸມໃສ່ການສົ່ງອອກຍ້ອນວ່າພວກເຂົາເປັນຜູ້ຊອກຫາຂໍ້ມູນຂ່າວສານທີ່ຕ້ອງການສຳລັບການປະເມີນການລົງທຶນຂອງຕົນ.

291. **ເວັບໄຊຂອງສູນຂໍ້ມູນຂ່າວສານການຄ້າ ຂອງລາວ (LTP) ຕ້ອງການການປັບປຸງເພື່ອໃຫ້ເປັນມິດກັບຜູ້ໃຊ້ຫຼາຍຂຶ້ນ.** LTP ຈັດໃຫ້ຜູ້ໃຊ້ເຂົ້າເຖິງຂໍ້ມູນພາສີນໍາເຂົ້າແລະຂໍ້ມູນຂ່າວສານອື່ນໆ ແລະ ກໍ່ໄດ້ເປັນການປັບປຸງຢ່າງໃຫຍ່ຫຼວງ, ແຕ່ວ່າຜູ້ທີ່ມີທ່າແຮງສົ່ງອອກ ຍັງບໍ່ສາມາດທີ່ຈະຊອກຫາຄ່າທໍານຽມການສົ່ງອອກແລະອາກອນຈາກແຫຼ່ງດັ່ງກ່າວ. ໃນຂະນະທີ່ຂໍ້ມູນກ່ຽວກັບຄ່າທໍານຽມການສົ່ງອອກແລະອາກອນແມ່ນມີຢູ່ໃນ LTP, ຜູ້ຈະຊອກຕ້ອງຮູ້ຊື່ສະເພາະຂອງເອກະສານ. ຍົກຕົວຢ່າງ, ເພື່ອຊອກຫາອັດຕາພາສີສົ່ງອອກ, ກ່ອນອື່ນໝົດ ຕ້ອງໄປຊອກທີ່ "ຄົ້ນຫາຂໍ້ມູນ", ແລ້ວເລືອກ "ຊອກຫາເອກະສານທາງກົດໝາຍ", ຈາກນັ້ນເລືອກ "ປະເພດເອກະສານ" ຈາກເມນູເລື່ອນລົງແລະເລືອກ "ອົງການທີ່ເປັນຜູ້ອອກ" ຈາກເມນູເລື່ອນລົງ. ຍັງເປັນໄປບໍ່ໄດ້ສໍາລັບນັກລົງທຶນຫຼືຜູ້ທີ່ມີທ່າແຮງສົ່ງອອກ ທີ່ຈະໄດ້ຮັບຂໍ້ມູນແບບງ່າຍໆ ເຊັ່ນອັດຕາພາສີສົ່ງອອກກາເຟ, ຖົ່ວເຫຼືອງ, ສາລີ ແລະອື່ນໆ, ເພື່ອນໍາໄປຄິດໄລ່ການມີກໍາໄລຫຼືຄວາມສາມາດດ້ານການແຂ່ງຂັນໃນຂະບວນການຕັດສິນໃຈ ແລະການວາງແຜນ.

292. **ຂໍ້ມູນຂ່າວສານກ່ຽວກັບຜະລິດຕະພັນກະສິກໍາ ທີ່ຕ້ອງເສຍອາກອນສົ່ງອອກຂາດຄວາມໂປ່ງໃສ.** ໃນບັນຊີລາຍຊື່ຜະລິດຕະພັນ "ທີ່ຕ້ອງເສຍພາສີສົ່ງອອກ", ຜະລິດຕະພັນກະສິກໍາສ່ວນໃຫຍ່ແມ່ນບໍ່ໄດ້ລວມຢູ່ໃນນີ້. ດັ່ງນັ້ນ, ຜະລິດຕະພັນທີ່ບໍ່ໄດ້ລະບຸໄວ້ໃນ "ສິນຄ້າຕ້ອງເສຍພາສີສົ່ງອອກ" ແມ່ນບໍ່ມີພາສີສົ່ງອອກໂດຍປະລິຍາຍ. ແນວໃດກໍ່ຕາມ, ໃນວົງການອຸດສາຫະກໍາກາເຟ, ຜູ້ສົ່ງອອກບາງຄົນທີ່ໃຫ້ສໍາພາດອ້າງວ່າຕ້ອງເສຍພາສີສົ່ງອອກຕ່າງຫາກຈາກອາກອນກໍາໄລທີ່ເກັບໄດ້ໃນແຕ່ລະຄັ້ງທີ່ມີການສົ່ງອອກ, ໃນເວລາດຽວກັນ ຮອງປະທານສະມາຄົມກາເຟລາວໄດ້ໃຫ້ສໍາພາດວ່າມີພຽງແຕ່ເກັບອາກອນກໍາໄລ ກ່ອນມີການຈັດສົ່ງສິນຄ້າອອກ[44] ແຕ່ລະຄັ້ງ. ການຄິດໄລ່ບໍ່ໄດ້ອີງໃສ່ອັດຕາທີ່ປະກາດ (ບໍ່ມີອັດຕາທີ່ໄດ້ປະກາດ) ແຕ່ເປັນການອ້າງອີງຂອງເຈົ້າໜ້າທີ່ ເຊິ່ງບໍ່ໄດ້ເປີດເຜີຍຕໍ່ສາທາລະນະ. ຂໍ້ມູນຂ່າວສານກ່ຽວກັບພາສີສົ່ງອອກຈາກສະມາຊິກ ຂອງອຸດສາຫະກໍາແມ່ນບໍ່ສອດຄ່ອງກັນ; ອັນນີ້ແມ່ນບັນຫາທົ່ວໄປ. ຕົວຢ່າງ, ຜູ້ຜະລິດຕ້ອງຈ່າຍ 200 ກີບ/ກິໂລ ຕໍ່ເມັດກາເຟດິບຕາກແຫ້ງທີ່ຍັງມີເປືອກ ເມື່ອເຄື່ອນຍ້າຍຈາກສວນມາໂຮງສີ ເພື່ອສີເອົາແຕ່ເມັດກາເຟ ຫຼື ໃຫ້ຈ່າຍເງິນເມື່ອຈະຍ້າຍໝາກກາເຟອອກຈາກບ້ານ. ໃນເດືອນພະຈິກ 2019, ກະຊວງການເງິນໄດ້ອອກຄໍາສັ່ງຍົກເລີກອາກອນນີ້ແລະມີຜົນບັງຄັບໃຊ້ທັນທີ. ໃນເດືອນພະຈິກ 2020, ສະມາຄົມກາເຟລາວ ລາຍງານວ່າ ມີອໍານາດການປົກຄອງບ້ານຈໍານວນໜຶ່ງຍັງເກັບອາກອນທີ່ຍົກເລີກນີ້ຢູ່.

### 6.3.4 ສັດລ້ຽງ

293. **ຄວາມຕ້ອງການບໍລິໂພກຊີ້ນສັດ ແລະ ຜະລິດຕະພັນສັດພາຍໃນ ສປປ ລາວ ໄດ້ເພີ່ມຂຶ້ນໃນຫຼາຍທົດສະວັດທີ່ຜ່ານມາຄຽງຄູ່ກັບທາອຽງຂອງພາກພື້ນ.** ການຜະລິດສັດລ້ຽງຂອງປະເທດຍັງໄດ້ຂະຫຍາຍຕົວດ້ວຍການເພີ່ມຂຶ້ນຂອງປະຊາກອນງົວ, ໝູ, ແບ້, ແລະສັດປີກ. ການຜະລິດໝູແມ່ນໃຫຍ່ທີ່ສຸດ, ຮອງລົງມາແມ່ນງົວ, ຄວາຍ, ແລະແບ້ (ເບິ່ງຮູບ 6.7). ໃນຂະນະທີ່ການລ້ຽງງົວເປັນສິນຄ້າໄດ້ມີຄວາມສໍາຄັນໃນບໍ່ດົນມານີ້, ປະມານ 98 ສ່ວນຮ້ອຍຂອງຝູງງົວໃນ ສປປ ລາວ ແມ່ນລ້ຽງໂດຍຄົວເຮືອນໃນເຂດຊົນນະບົດແບບຂະໜາດນ້ອຍ (ນາປາເສີດ ແລະ ນາປາສິດ, 2018). ຊາວກະສິກອນຜູ້ລ້ຽງສັດຂະໜາດນ້ອຍມັກລ້ຽງງົວ ແລະຄວາຍ ແບບປ່ອຍໃຫ້ໄປກິນຫຍ້າຕາມທໍາມະຊາດ. ສປປ ລາວ ໄດ້ສົ່ງອອກປະມານ 25 ສ່ວນຮ້ອຍ ຂອງການຜະລິດສັດລ້ຽງ ຂອງຕົນ ແລະ ສ່ວນທີ່ເຫຼືອແມ່ນບໍລິໂພກພາຍໃນປະເທດ.

294. **ການລ້ຽງສັດແມ່ນໃຊ້ເພື່ອເສີມລາຍໄດ້ ແລະ ເປັນແຫຼ່ງໂປຼຕີນ.** ການເຮັດຟາມລ້ຽງສັດອາດສາມາດປະກອບສ່ວນເຂົ້າໃນການລຶບລ້າງບັນຫາການຢຸດຢັ້ງການຈະເລີນເຕີບໂຕ, ນໍ້າໜັກຕໍ່າ ແລະ ການເປັນພະ ຍາດຈ່ອຍຂາດອາຫານຂອງເດັກນ້ອຍ ແລະ ຫຼຸດຜ່ອນຄວາມທຸກຍາກ, ຖ້າຫາກໃຫ້ບັນດາຄົວເຮືອນໃນເຂດຊົນນະບົດສາມາດລ້ຽງສັດໄດ້ຕາມທີ່ເຂົາເຈົ້າເລືອກເອງຢ່າງເຕັມທີ່. ໄຂ່ສັດປີກ ແລະ ຊີ້ນ ແລະ ນົມຈາກຄວາຍ, ງົວ ແລະ ແບ້ແມ່ນແຫຼ່ງທາດໂປຼຕີນທີ່ສໍາຄັນ. ການລ້ຽງສັດສາມາດຊ່ວຍແກ້ໄຂບັນຫາສຸຂະພາບ, ປະກອບສ່ວນປັບປຸງການພັດທະນາມະນຸດ, ແຕ່ຍັງເປັນອົງປະກອບທີ່ສໍາຄັນທາງຍຸດທະສາດສໍາລັບການພັດທະນາເສດຖະກິດ. ການລ້ຽງສັດເປັນການຈັດໃຫ້ມີອາຫານ, ອາຊີບ ແລະ ລາຍໄດ້, ແລະ ຜົນຜະລິດພອຍໄດ້ຂອງສັດ ເຊິ່ງມີການນໍາໃຊ້ຫຼາຍດ້ານເພື່ອເປັນວັດຖຸດິບໃນການຜະລິດແກ່ສິນຄ້າອຸປະໂພກ/ບໍລິໂພກ ແລະ ສິນຄ້າອຸດສາຫະກໍາ.

44. ປັດຈຸບັນນີ້, ອາກອນກໍາໄລສົ່ງອອກກາເຟແມ່ນຄິດໄລ່ໂດຍການຄູນມູນຄ່າຕາມໃບສະເໜີລາຄາໃຫ້ 7 ສ່ວນຮ້ອຍ, ຈາກນັ້ນນໍາຜົນອອກມາຄູນດ້ວຍອາກອນກໍາໄລ 20 ສ່ວນຮ້ອຍ ສໍາລັບການສົ່ງອອກກາເຟ, ຕາມທ່ານ ແສງຈັນ ຄໍາມູນທາ, ຮອງປະທານສະມາຄົມກາເຟລາວ.

## ຮູບທີ 6.7 ຄວາຍ, ງົວ, ແບ້ ແລະ ໝູ ໃນ ສປປ ລາວ: 2009-18




Data source: https://laosis.lsb.gov.la/ (accessed 1 September 2020).

*ໝາຍເຫດ: ທ່ອນສີຟ້າແມ່ນຄວາຍ, ສີສົ້ມແມ່ນງົວ, ສີເທົາແມ່ນແບ້, ສີເຫລືອງແມ່ນໝູ. ໃນຕົວເລກ, ຈຸດ ແມ່ນ ຈໍ້າ ຂອງ ຫົວໜ່ວຍພັນ.*

## ຮູບທີ 6.8 ສັດປີກ ຂອງ ສປປ ລາວ ແຍກຕາມພາກ: 2009-18




Data source: https://laosis.lsb.gov.la/ (accessed 1 September 2020).

*ໝາຍເຫດ: ທ່ອນສີຟ້າແມ່ນຂອງປະເທດ, ສີສົ້ມແມ່ນພາກເໜືອ, ສີເທົາແມ່ນພາກກາງ, ສີເຫລືອງພາກໃຕ້. ໃນຕົວເລກ, ຈຸດ ແມ່ນ ຈໍ້າ ຂອງຫົວໜ່ວຍພັນ.*

295. **ຝູງຄວາຍ ແລະ ງົວ ສ່ວນຫຼາຍແມ່ນຢູ່ພາກກາງ, ແບ້ສ່ວນຫຼາຍແມ່ນຢູ່ເຂດພາກເໜືອ ແລະ ພາກກາງ ແລະ ໝູ ແລະ ສັດປີກ, ເນື່ອງຈາກການຂະຫຍາຍຕົວໃນມໍ່ໆມານີ້, ສວນຫຼາຍແມນຢູພາກໃຕ.** ໃນໄລຍະ 2009 - 18, ປະຊາກອນໝູ ແລະສັດປີກໃນພາກໃຕ້ໄດ້ເພີ່ມຂຶ້ນຫຼາຍກວ່າພາກເໜືອ ແລະພາກກາງ. ມີຄວາມແຕກຕ່າງທີ່ເຫັນໄດ້ຊັດເຈນໃນບັນດາ ປະເພດຟາມງົວໃນພາກຕ່າງໆ, ດັ່ງທີ່ສະແດງຢູ່ໃນຕາຕະລາງ 6.6. ການລ້ຽງງົວໃນພາກໃຕ້ແມ່ນເຮັດເພື່ອການຄ້າຫຼາຍ ກວ່າໃນພາກອື່ນໆ, ເນື່ອງຈາກວ່າ 5 ສ່ວນຮ້ອຍ ຂອງງົວໃນພາກໃຕ້ແມ່ນລ້ຽງຢູ່ໃນຟາມທີ່ລ້ຽງເປັນສິນຄ້າ, ໃນຂະນະທີ່ງົວ ໃນພາກເໜືອ ແລະພາກກາງມີໜ້ອຍກວ່າ 1 ສ່ວນຮ້ອຍແມ່ນລ້ຽງຢູ່ໃນຟາມທີ່ລ້ຽງເປັນສິນຄ້າ. ພາກໃຕ້ກວມເອົາພຽງ ແຕ່ 18 ສ່ວນຮ້ອຍ ຂອງປະຊາກອນງົວທັງໝົດໃນປະເທດ, ແຕ່ພາກນີ້ໄດ້ລ້ຽງ 57 ສ່ວນຮ້ອຍ ຂອງງົວທີ່ລ້ຽງເພື່ອຂາຍທັງ ໝົດໃນປະເທດ (ສາມາດຄິດໄລ່ຈາກຕາຕະລາງ 6.6). ຕາຕະລາງ 6.6 ຍັງສະແດງໃຫ້ເຫັນກຸ່ມຊາວກະສິກອນລ້ຽງງົວທີ່ ສ້າງຂຶ້ນເພື່ອຮັບຜົນປະໂຫຍດຈາກການແບ່ງປັນຂໍ້ມູນ ແລະ ຊັບພະຍາກອນ.

## ຕາຕະລາງ 6.4 ປະເພດຂອງການລ້ຽງງົວ ໃນ ສປປ ລາວ: 2016

| ພາກ | ປະຊາກອນງົວທັງໝົດ | ຟາມທີ່ລ້ຽງງົວເປັນສິນຄ້າ | | | ຊາວກະສິກອນຂະໜາດນ້ອຍ | | ກຸ່ມຊາວກະສິກອນ | | |
|---|---|---|---|---|---|---|---|---|---|
| | | ຈຳນວນງົວ | ຈຳນວນຟາມ | ງົວ/ຟາມ | ຈຳນວນ ງົວ | % | ງົວ | ຈຳນວນກຸ່ມ | ງົວ/ກຸ່ມ |
| ພາກເໜືອ | 490.256 | 4.198 | 50 | 84,0 | 486.058 | 99,1 | 7.518 | 116 | 64,8 |
| ພາກກາງ | 1.053.867 | 8.196 | 64 | 128,1 | 1.045.671 | 99,2 | 9.725 | 255 | 38,1 |
| ພາກໃຕ້ | 337.783 | 16.447 | 56 | 293,7 | 321.336 | 95,1 | | | |
| ໃນທົ່ວປະເທດ | 1.881.906 | 28.841 | 170 | 169,7 | 1.853.065 | 98,5 | 17.243 | 371 | 46,5 |

*ແຫຼ່ງຂໍ້ມູນ: ຄິດໄລ່ຈາກນາປະເສີດ ແລະ ນາປະສິດ(2018)*

296. **ມີການຂະຫຍາຍຕົວ ຂອງຄວາມຕ້ອງການຜະລິດຕະພັນຊີ້ນ ແລະສັດ ທີ່ແຂງແຮງຕາມພາກ.** ຄວາມຕ້ອງການບໍລິໂພກຊີ້ນສັດ ແລະ ຜະລິດຕະພັນສັດມີການຂະຫຍາຍຕົວໃນ ສປປ ລາວ ແລະ ປະ ເທດເພື່ອນບ້ານໃກ້ຄຽງ ແລະ ຄູ່ຄ້າລາຍໃຫຍ່ຄື ຈີນ, ຫວຽດນາມ, ແລະ ໄທ (ນາປະເສີດ ແລະ ນາປະສິດ, 2018; FAO, 2005; Millar ແລະ ໂພຕະກຸນ, 2008). ອັນນີ້ເປັນໂອກາດອັນໃຫຍ່ຫຼວງໃຫ້ ສປປ ລາວ ເພື່ອຍາດແຍ່ງເອົາປະໂຫຍດຈາກການພັດທະນາຂະແໜງລ້ຽງສັດ, ການປະກອບສ່ວນຫຼຸດຜ່ອນຄວາມທຸກຍາກ ໂດຍສະເພາະເຂດພູດອຍທາງພາກເໜືອຂອງປະເທດ ຕາມການຊີ້ແຈງຂອງ Millar ແລະ ໂພຕະກຸນ, (2008) ແລະ ການພັດທະນາເສດຖະກິດສັງຄົມຢ່າງທົ່ວເຖິງ ແລະ ຍືນຍົງ. ໃນປີ 2000, ການບໍລິໂພກຊີ້ນງົວຕໍ່ຫົວຄົນໃນ ສປປ ລາວ ແມ່ນປະມານ 6,12 ກກ.[45] ຮອດປີ 2013, ມັນໄດ້ເພີ່ມຂຶ້ນເປັນ 7,29 ກິໂລ, ສູງກວ່າປະເທດໄທ, ເຊິ່ງແມ່ນ 2,56 ກິໂລກຣາມຕໍ່ປີ.

297. **ການລົງທຶນຈາກຕ່າງປະເທດ ເປັນແຮງຊຸກຍູ້ໃຫ້ຜະລິດຕະພາບໃນຂະແໜງລ້ຽງສັດເພີ່ມຂຶ້ນ.** ການເຂົ້າມາຂອງກຸ່ມບໍລິສັດຈະເລີນໂພກະພັນ (CP) ຂອງໄທໃນປີ 2007 ໄດ້ປະກອບສ່ວນຊຸກຍູ້ການຜະລິດໝູ, ສັດປີກ ແລະ ໄຂ່ຂອງ ສປປ ລາວ. ບໍລິສັດໄດ້ເລີ່ມດຳເນີນທຸລະກິດໂຮງງານອາຫານຢູ່ນະຄອນຫຼວງ, ບວກກັບທຸລະກິດຟາມລ້ຽງໝູ ແລະ ລ້ຽງໄກ່ ແລະ ຟາມປາ; ຕໍ່ມາໄດ້ຂະຫຍາຍໄປແຂວງຈຳປາສັກ ແລະ ແຂວງອື່ນໆ. ນອກນັ້ນ, ຍັງມີການລົງທຶນຈາກນັກລົງທຶນຕ່າງປະເທດອື່ນໆ, ລວມທັງອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ INGO, ເຊິ່ງໄດ້ຮັບການສະໜັບສະໜູນຈາກຄູ່ຮ່ວມພັດທະນາສອງຝ່າຍ ແລະ ຫຼາຍຝ່າຍຂອງ ສປປ ລາວ ເພື່ອຊ່ວຍໃນການພັດທະນາການລ້ຽງສັດ.

298. **ການຂາດອາຫານສັດທີ່ມີຄຸນນະພາບ, ການສັກຢາປ້ອງກັນພະຍາດ ແລະຂໍ້ມູນຂ່າວສານແມ່ນຂໍ້ຈຳກັດທີ່ສຳຄັນ.** ຂໍ້ຈຳກັດຫຼັກຂອງການພັດທະນາການລ້ຽງສັດໃນ ສປປ ລາວ ແມ່ນການຂາດອາຫານສັດທີ່ໄດ້ມາດຖານເຊິ່ງເຮັດໃຫ້ອັດຕາຜົນຜະລິດຕ່ຳ ແລະ ຈຳກັດການເພີ່ມນ້ຳໜັກສັດ ແລະ ການຂາດການສັກຢາວັກຊີນເພື່ອປ້ອງກັນພະຍາດ ທີ່ເຮັດໃຫ້ເກີດອັດຕາການເຈັບເປັນ ແລະ ການຕາຍສູງໃນສັດ (ນາປະເສີດ ແລະ ນາປະສິດ, 2018; FAO, 2005). ໂດຍທົ່ວໄປແລ້ວການບໍລິການສັດຕະວະແພດໃນທົ່ວປະເທດແມ່ນຍັງບໍ່ເຂັ້ມແຂງ ແລະ ຂາດແຄນ ຢູ່ໃນເຂດຊົນນະບົດຫຼາຍແຫ່ງ, ເຊິ່ງກໍ່ໃຫ້ເກີດການສູນເສຍ ຂອງສັດລ້ຽງຢ່າງຫຼວງຫຼາຍ ແລະ ກະທົບຕໍ່ລາຍໄດ້ ແລະ ການສະໜອງສະບຽງອາຫານໃຫ້ແກ່ຊາວກະສິ ກອນຜູ້ລ້ຽງສັດຂະໜາດນ້ອຍຫຼາຍຄົນໃນແຕ່ລະປີ. ອາຫານທຳມະຊາດ ເຊັ່ນ: ຫຍ້າ ແລະ ຜະລິດຕະພັນພອຍໄດ້ທາງການກະເສດ ເຊັ່ນ: ເຟືອງເຂົ້າ, ມັນຕົ້ນ ແລະ ເສດເຫຼືອຂອງພືດຜັກທີ່ຖິ້ມ, ເຊິ່ງເປັນປະເພດທີ່ມີຄຸນຄ່າທາງອາຫານຕ່ຳ (ນາປະເສີດ ແລະ ນາປະສິດ, 2018). ອາຫານສັດທີ່ຜະລິດພາຍໃນປະເທດແມ່ນມີໜ້ອຍຫລາຍ ແລະ ບໍ່ພຽງພໍເພື່ອຮັກສາຕົ້ນທຶນອາຫານສັດໃຫ້ຕ່ຳພໍທີ່ຈະເຮັດໃຫ້ການລ້ຽງສັດ ທີ່ໃຊ້ອາຫານສັດທີ່ຜະລິດໃນໂຮງງານສາມາດແຂ່ງຂັນໄດ້ ແລະມີກຳໄລ.

299. **ມີຄວາມຕ້ອງການຂໍ້ມູນຂ່າວສານ ກ່ຽວກັບວິທີປະຕິບັດທີ່ດີໃນການລ້ຽງສັດ.** ຊາວກະສິກອນຂະ ໜາດນ້ອຍມີຄວາມຕ້ອງການຂໍ້ມູນຂ່າວສານທີ່ເປັນປະໂຫຍດ ກ່ຽວກັບເຕັກນິກການລ້ຽງສັດ ແລະກ່ຽວກັບ ວັດຖຸປະກອບຮັບໃຊ້ການລ້ຽງສັດ (ເຊັ່ນ ຈະຫາຊອກໄດ້ຢູ່ໃສ, ລາຄາ, ວິທີຮຽນເຮັດດ້ວຍຕົວເອງ). ບາງຂໍ້ມູນຂ່າວສານກ່ຽວກັບການລ້ຽງສັດ ແລະເຕັກນິກການກະສິກຳອື່ນໆ ແມ່ນມີຢູ່ໃນຮູບແບບຕ່າງໆ (ປຶ້ມນ້ອຍ, ແຜ່ນພັບ, ການສຳມະນາ, ເວັບໄຊ), ແຕ່ຂໍ້ມູນເຫລົ່ານີ້ກໍ່ບໍ່ແນ່ນອນ ແລະ ບໍ່ສາມາດຫາໄດ້ປານໃດ. ຊາວກະສິກອນຜູ້ລ້ຽງສັດຂະໜາດນ້ອຍ ຍັງຂາດແຄນຂໍ້ມູນຂ່າວສານກ່ຽວກັບການລ້ຽງສັດທີ່ເຂົ້າເຖິງໄດ້ງ່າຍວ່ອງໄວ ແລະ ບໍ່ເສຍຄ່າ; ອັນນີ້ເປັນອຸປະສັກທີ່ສຳຄັນ ຕໍ່ການພັດທະນາການລ້ຽງສັດແບບຄົບຖ້ວນກວມ ລວມກວ່າ.

45. FAO ຄາດຄະເນການບໍລິໂພກຕໍ່ຫົວຄົນໃນແຕ່ລະປີຂອງ ສປປ ລາວ, ໃນປີ 2013, ສຳລັບສັດປີກ, ຊີ້ນໝູ, ແລະ ຊີ້ນງົວແມ່ນ 4,21 ກິໂລ, 9,31 ກິໂລ, ແລະ 7,29 ກິໂລກຣາມ ຕາມລຳດັບ, ໂດຍອ້າງອີງຈາກບົດຂອງ Napaserth ແລະ Napasirth (2018).

300. **ພື້ນຖານໂຄງລ່າງຕະຫຼາດທີ່ຍັງບໍ່ດີພໍ, ໂຮງງານຂ້າສັດທີ່ມີຄຸນນະພາບຕ່ຳ, ລະບົບສາງເຢັນທີ່ຍັງດ້ອຍພັດທະນາ ແລະ ການຂາດການເຂົ້າເຖິງຂໍ້ມູນຂາວສານແບບເສລີແມ່ນຂໍ້ຈຳກັດຫຼັກໃນການສ້າງມູນຄ່າເພີ່ມ ແລະ ຜະລິດຕະພັນຊີ້ນທີ່ມີຄຸນນະພາບເພື່ອສົ່ງອອກ.** ໃນຂະນະທີ່ຮ້ານສັບພະສິນຄ້າທັນສະໄໝພວມປາກົດຕົວຂຶ້ນຢູ່ນະຄອນຫຼວງວຽງຈັນ ແລະໃນຫຼາຍຕົວເມືອງທີ່ຂອບຂ້າງມີຂະໜາດໃຫຍ່, ຊີ້ນ ຖືວ່າສ່ວນຫຼາຍແມ່ນຍັງຂາຍຢູ່ຕະຫຼາດສົດ. ໃນຕະຫຼາດທົ່ວໄປ ເອີ້ນວ່າຕະຫລາດເຄື່ອງສົດ ທີ່ມີຫລັງຄາມຸງແລະ ເປີດທາງດ້ານຂ້າງ, ການຂາຍຊີ້ນແມ່ນຈະມີການວາງຂາຍຢູ່ເທິງໂຕະແບບເປີດ ໂດຍບໍ່ມີການທຳຄວາມເຢັນ. ດັ່ງນັ້ນ, ຊີ້ນຕ້ອງໄດ້ຮັບການຂາຍພາຍໃນມື້ ຫຼັງຈາກສັດໄດ້ຜ່ານການຂ້າ ແລະ ຊີ້ນຈະຖືກປົນເປື້ອນຈາກຝຸ່ນ ແລະແມງວັນ. ນອກຈາກນັ້ນ, ຊີ້ນງົວທີ່ລ້ຽງຢູ່ພາຍໃນປະເທດມີທ່າອ່ຽງທີ່ຈະເປັນຊີ້ນຫຍາບຫຍໍ້າຍາກ, ຕາມປົກກະຕິແມ່ນເນື່ອງມາຈາກການລ້ຽງດົນເກີນໄລຍະເວລາທີ່ເໝາະສົມ ເຊັ່ນດຽວກັນ ກໍ່ມີ ວັດຖຸປະກອບອື່ນໆພົວພັນ ເຊັ່ນ ແນວພັນ, ການໃຫ້ອາຫານ ແລະ ການດູແລຮັກສາ. ຈາກນັ້ນ, ຊີ້ນງົວທີ່ມີຄຸນນະພາບທີ່ໃຊ້ໃນຮ້ານອາຫານຈຶ່ງຕ້ອງໄດ້ນຳເຂົ້າ. ດ້ວຍເຫດນັ້ນ, ການສູນເສຍສ່ວນແບ່ງໃນຕະ ຫຼາດຊີ້ນພາຍໃນ ສຳລັບງົວທີ່ລ້ຽງຢູ່ໃນທ້ອງຖິ່ນ ບໍ່ແມ່ນເປັນຍ້ອນການແຂ່ງຂັນທາງດ້ານແນວພັນ, ແຕ່ແມ່ນຍ້ອນຄຸນນະພາບຊີ້ນທີ່ບໍ່ດີ. ນອກຈາກພື້ນຖານໂຄງລ່າງຕະຫຼາດແລ້ວ, ໂຮງງານຂ້າສັດໃນ ສປປ ລາວ ໂດຍທົ່ວໄປແລ້ວ ຍັງມີຄຸນນະພາບຕ່ຳ. ຄຽງຄູ່ກັບລະບົບສາງເຢັນທີ່ຍັງດ້ອຍພັດທະນາ, ຍ້ອນພື້ນຖານໂຄງລ່າງຕະຫຼາດທີ່ຍັງບໍ່ດີພໍ, ສປປ ລາວ ຈຶ່ງຍັງບໍ່ມີຜະລິດຕະພັນຊີ້ນງົວສົດທີ່ມີການຫຸ້ມຫໍ່ທີ່ເໝາະສົມເພື່ອຍືດອາຍຸຄຸນນະພາບ ແລະ ຂະຫຍາຍໄລຍະຄວາມສົດຂອງຊີ້ນ. ດັ່ງນັ້ນ, ການສົ່ງອອກຊີ້ນງົວຈາກ ສປປ ລາວ ມີພຽງແຕ່ໃນຮູບແບບຂອງສັດທີ່ມີຊີວິດເທົ່ານັ້ນ, ເຮັດໃຫ້ເກີດການສູນເສຍໂອກາດໃນການເພີ່ມມູນຄ່າ ແລະ ພັດທະນາຜະລິດຕະພັນຈາກສັດ ໂດຍນຳໃຊ້ຊີ້ນສ່ວນ ແລະ ຜົນຜະລິດພອຍໄດ້ ຂອງສັດ.

301. **ການຂາດແຄນຂໍ້ມູນຂ່າວສານຕະຫຼາດ ກໍ່ເປັນອຸປະສັກ ສຳລັບຊາວກະສິກອນຂະໜາດນ້ອຍ.** ສັນຍາການຄ້າລະຫວ່າງລັດຖະບານກັບລັດຖະບານ ຂອງ ສປ ຈີນ ແລະສປປລາວໄດ້ອະນຸຍາດໃຫ້ມີການນຳເຂົ້າສິນຄ້າກະສິກຳບາງຢ່າງໂດຍບໍ່ຕ້ອງເສຍພາສີລວມທັງງົວຈາກສປປລາວເຂົ້າໄປຈີນ. ສິ່ງດັ່ງກ່າວມີຄວາມສາມາດບົ່ມຊ້ອນທີ່ຈະສ້າງປະໂຫຍດໃຫ້ຊາວກະສິກອນລ້ຽງສັດຂະໜາດນ້ອຍ ຖ້າຫາກເຂົາເຈົ້າເຂົ້າໃຈຄວາມຕ້ອງການຂອງຕະຫຼາດ ເປັນຕົ້ນ ດ້ານຄຸນນະພາບສິນຄ້າ, ລາຄາຕະຫຼາດ ແລະ ຄວາມຕ້ອງການຕາມລະດູການ.

302. **ການເຮັດໃຫ້ຊາວກະສິກອນເຂົ້າເຖິງອາຫານສັດທີ່ມີຄຸນນະພາບ, ການສັກຢາປ້ອງກັນພະຍາດ ແລະ ຂໍ້ມູນຂ່າວສານແມ່ນເປັນເລື່ອງສຳຄັນ.** ມີຄວາມຈຳເປັນ ໃນລະດັບປະເທດໃນການຊຸກຍູ້ການພັດທະນາການປູກພືດກະສິກຳໃຫ້ເປັນທຸລະກິດກະສິກຳ ທີ່ສາມາດເຕີບໂຕໄດ້ພໍຈະຜະລິດບັນດາວັດຖຸດິບຕົ້ນຕໍລາ ຄາຖືກເປັນປະເພດຜົນຜະລິດພອຍໄດ້, ທີ່ຕ້ອງການໃນການຜະລິດອາຫານສັດທີ່ມີຄຸນນະພາບ. ນະໂຍ ບາຍທີ່ສົ່ງເສີມການຂະຫຍາຍຕົວ ແລະການປັບປຸງການບໍລິການສັດຕະວະແພດເອກະຊົນແມ່ນສຳຄັນເພື່ອເຮັດໃຫ້ເກີດຜົນສຳເລັດ. ການປັບປຸງການບໍລິການການສັກວັກຊີນ ຂອງພາກລັດຈະມີຄວາມຈຳເປັນສຳລັບບາງພື້ນທີ່ທີ່ການບໍລິການເອກະຊົນບໍ່ສາມາດເຮັດໄດ້ ຍ້ອນບໍ່ມີກຳໄລ,

303. **ການເຂົ້າເຖິງຂໍ້ມູນຂ່າວສານໄດ້ ຢ່າງສະດວກວ່ອງໄວ ໂດຍບໍ່ເສຍຄ່າ ແມ່ນມີຄວາມສຳຄັນຫຼາຍສຳລັບການພັດທະນາການລ້ຽງສັດ.** ພື້ນຖານໂຄງລ່າງ ທີ່ກ່ຽວຂ້ອງແມ່ນເວທີໃຫ້ຂໍ້ມູນຂ່າວສານທາງອອນລາຍເຊິ່ງໃຊ້ຜ່ານໂທລະສັບມືຖືທີ່ປະຊາຊົນທົ່ວໄປສາມາດເຂົ້າເຖິງໄດ້ຢ່າງອິດສະຫລະ ເພື່ອສະໜອງຂໍ້ມູນດ້ານວິຊາການ ແລະວັດຖຸປະກອບຮັບໃຊ້ການລ້ຽງສັດ (ເຊັ່ນ ຈະຊອກໄດ້ຢູ່ໃສ, ລາຄາ, ວິທີຮຽນເຮັດດ້ວຍຕົວເອງ) ທີ່ຈະເປັນປະໂຫຍດສຳລັບຊາວກະສິກອນຂະໜາດນ້ອຍໃນການລ້ຽງສັດ.

304. **ລະບຽບການນຳເຂົ້າເຮັດໃຫ້ຕົ້ນທຶນອາຫານສັດເພີ່ມຂຶ້ນ.** ສປປ ລາວ ຄວນລຶບລ້າງຂໍ້ກຳນົດ ແລະ ຂັ້ນຕອນບໍລິຫານຂອງລັດທີ່ຊ້ຳຊ້ອນ ແລະ ຊ້ຳຊາກເກີນຄວາມຈຳເປັນສຳລັບການນຳເຂົ້າອາຫານສັດ. ອັນນີ້ຈະເຮັດໃຫ້ທັງເວລາ ແລະ ຕົ້ນທຶນຄ່າໃຊ້ຈ່າຍໂດຍກົງທາງດ້ານການເງິນ ທີ່ກ່ຽວຂ້ອງກັບການນຳເຂົ້າອາຫານສັດຫຼຸດລົງ ພ້ອມດຽວກັນກັບລາຄາອາຫານສັດ.

### 6.3.5 ສາລີ

305. **ສາລີແມ່ນໜຶ່ງໃນພືດທີ່ສຳຄັນຂອງ ສປປ ລາວ ທີ່ປູກໂດຍຊາວສວນຂະໜາດນ້ອຍເພື່ອຄ້ຳປະກັນສະບຽງອາຫານ ແລະ ໃຫ້ມີລາຍໄດ້ເປັນເງິນສົດ.** ສາລີຍັງມີຄວາມສຳຄັນທາງດ້ານຍຸດທະສາດ. ມັນເປັນສິ່ງສຳຄັນໂດຍສະເພາະສຳລັບຊຸມຊົນຊົນນະບົດທີ່ຂອບຂ້າງຫ່າງໄກສອກຫຼີກໃນເຂດພູດອຍພາກເໜືອຂອງປະເທດ, ເຊິ່ງເກີດສະພາບຂາດແຄນເຂົ້າໃນປີທີ່ມີສະພາບອາກາດບໍ່ເອື້ອອຳນວຍແລະການປູກພືດທີ່ມີລາຍໄດ້ອື່ນໆມີຈຳກັດຫຼາຍຫຼືບໍ່ໄດ້ປູກ. ສາລີມີຄວາມສຳຄັນເພື່ອໃຊ້ເປັນອາຫານສັດສຳລັບພັດທະນາການລ້ຽງສັດ.

306. **ສ່ວນຫລາຍແລ້ວສາລີແມ່ນຜະລິດເປັນແບບມູນເຊື້ອເພື່ອຄ້ຳປະກັນສະບຽງອາຫານ ແລະ ສ່ວນໃຫຍ່ແມ່ນຢູ່ພາກເໜືອ, ຍ້ອນພູມສັນຖານທຳມະຊາດ ຂອງພາກເໜືອແມ່ນບໍ່ເໝາະສົມປານໃດໃນການຜະ ລິດເຂົ້າ.** ແນວໃດກໍ່ຕາມ, ເລີ່ມແຕ່ຕົ້ນຊຸມປີ 2000, ການຜະລິດສາລີແມ່ນໄດ້ເລີ່ມຮັບໃຊ້ຈຸດປະສົງສອງດ້ານຂອງການຄ້ຳປະກັນສະບຽງອາຫານ ແລະ ການໃຫ້ມີລາຍໄດ້ເປັນເງິນສົດ (ດວງສະຫວັນ ແລະ ບົວທອນ, 2006; ໂຄງການຄົ້ນຄວ້າປ່າໄມ້ ແລະ ກະສິກຳເນີນສູງລາວ-ຊຸຍແອດ, 2006). ຊາວບ້ານເປັນຈຳນວນຫຼວງຫຼາຍໃນເຂດຊົນນະບົດ ຖືວ່າໜ້າທີ່ ຂອງສາລີແມ່ນແຫຼ່ງລາຍໄດ້ເປັນເງິນສົດ. ສຳລັບຫຼາຍຄົວເຮືອນໃນເຂດຕ່າງໆຂອງພາກເໜືອ, ສາລີເປັນແຫຼ່ງລາຍໄດ້ເງິນສົດແຫລ່ງດຽວສຳລັບການຈ່າຍຄ່າໂຮງ ຮຽນໃຫ້ເດັກນ້ອຍ, ການປັບປຸງປົວແປງເຮືອນຊານ, ການຊື້ສິ່ງຂອງຕ່າງໆທີ່ຕ້ອງການໃນຄົວເຮືອນ, ການຊື້ເຂົ້າ ແລະ ອື່ນໆ (Kallio ແລະຄະນະຊຽວຊານ, 2019).

307. **ການຜະລິດສາລີເພີ່ມຂຶ້ນຢ່າງຕໍ່ເນື່ອງເຖິງປີ 2016 ແລະຈາກນັ້ນກໍ່ຫຼຸດລົງ.** ພາກເໜືອ, ເຊິ່ງເປັນພາກໃຫຍ່ຂອງການຜະລິດສາລີ, ກວມເອົາປະມານ 70 ສ່ວນຮ້ອຍຂອງຜົນຜະລິດທັງໝົດໃນທົ່ວປະເທດໃນໄລຍະປີ 2009 - 18, ຮອງມາແມ່ນພາກກາງ, ເຊິ່ງ ມີຜົນຜະລິດ 23 ສ່ວນຮ້ອຍສະເລ່ຍຕໍ່ປີໃນໄລຍະດຽວກັນນີ້. ການຜະລິດສາລີໄດ້ຂະຫຍາຍຕົວເພີ່ມຂຶ້ນຢ່າງບໍ່ຢຸດຢັ້ງມາຮອດປີ 2016, ໃນນັ້ນປະລິມານການຜະລິດບັນລຸໄດ້ 1,55 ລ້ານໂຕນ. ໃນໄລຍະມໍ່ໆມານີ້, ການນຳເອົາແນວພັນປະສົມຈາກຫວຽດນາມມາໃຊ້ ແລະ ການເຂົ້າສູ່ຕະຫຼາດສົ່ງອອກ ຂອງປະເທດບ້ານໃກ້ເຮືອນຄຽງ (ໄທ, ຫວຽດນາມ, ຈີນ) ໄດ້ເປັນເຫດຜົນ ຂອງການຂະຫຍາຍຕົວດັ່ງກາວ. ແນວໃດກໍ່ຕາມ, ການຜະລິດສາລີໄດ້ເລີ່ມຫຼຸດລົງພາຍຫຼັງປີ 2016, ຄືຫຼຸດລົງເປັນ 0,77 ລ້ານໂຕນໃນປີ 2018.

308. **ສປປ ລາວ ເປັນຜູ້ສົ່ງອອກສາລີສຸດທິ. ອີງການ FAO ລາຍງານວ່າ ສປປ ລາວ ສົ່ງອອກ 40 - 50 ລ້ານໂດລາລະຫວ່າງປີ 2015 ຫາ 2018.** ເນື່ອງຈາກຊາຍແດນມີຫລາຍຈຸດທີ່ຂອດຫາກັນໄດ້, ການສົ່ງອອກທັງໝົດມີຄວາມເປັນໄປໄດ້ທີ່ຈະມີຫລາຍກວ່ານີ້. ການຜະລິດສາລີເປັນສິນຄ້າໃນ ສປປ ລາວ ແມ່ນປູກໂດຍໃຊ້ຕົວແບບການເຊັນສັນຍາຜູກພັນສອງສິ້ນ, ເຊິ່ງໂດຍທົ່ວໄປແລ້ວດ້ວຍຮູບແບບ "2+3", ເຖິງວ່າໃນຕົວຈິງແມ່ນໄດ້ມີຫຼາຍຮູບແບບ. "2" ໝາຍເຖິງທີ່ດິນ ແລະ ແຮງງານທີ່ຊາວສວນຂະໜາດນ້ອຍເປັນຜູ້ສະໜອງໃຫ້ ແລະ "3" ໝາຍເຖິງການປະກອບສ່ວນຂອງນັກລົງທຶນຄື: ທຶນ (ມັກຈະເປັນວັດຖຸປະກອບຮັບໃຊ້ເຂົ້າໃນການຜະລິດ), ການສະໜັບສະໜູນດ້ານວິຊາການ (ເຕັກນິກ, ເຕັກໂນໂລຊີ) ແລະ ຕະຫຼາດ (ການຮັບປະກັນການເກັບຊື້ຜົນຜະລິດໂດຍນັກລົງທຶນຕາມລາຄາທີ່ແນ່ນອນທີ່ໄດ້ຕົກລົງກັນ).

ຮູບທີ 6.9 ການກະຈາຍໄປຕາມພາກຂອງການຜະລິດສາລີໃນ ສປປ ລາວ: 2009-18




Data source: https://laosis.lsb.gov.la/ (accessed 1 September 2020).

*ໝາຍເຫດ: ທ່ອນສີຟ້າແມ່ນຂອງປະເທດ, ສີສົ້ມແມ່ນພາກເໜືອ, ສີເທົາແມ່ນພາກກາງ, ສີເຫລືອງພາກໃຕ້. ໃນຕົວເລກ, ຈຸດ ແມ່ນ ຈໍ້າ ຂອງຫົວໜ່ວຍພັນ.*

309. **ລັດຖະບານສົ່ງເສີມໃຫ້ການປູກສາລີເພີ່ມຂຶ້ນ ເພື່ອແນໃສ່ຫຼຸດຜ່ອນການປູກເຂົ້າແບບຖາງປ່າເຮັດໄຮ່, ຫຼຸດຜ່ອນຄວາມທຸກຍາກ ແລະ ບັນລຸຈຸດປະສົງ ຂອງນະໂຍບາຍການເຕີບໂຕສີຂຽວ.** ສາລີແນວພັນປະສົມຈາກຫວຽດນາມ, ເຊິ່ງໃຫ້ຜົນຜະລິດຂ້ອນຂ້າງສູງກວ່າແນວພັນພື້ນເມືອງຂອງທ້ອງຖິ່ນ, ໄດ້ຮັບການສົ່ງເສີມ ແລະ ນຳເອົາມາໃຊ້ຢ່າງກວ້າງຂວາງໃນໄລຍະການຂະຫຍາຍຕົວຢ່າງໄວວານີ້ (2009-2016). ຈາກທັດສະນະຂອງຊາວກະສິກອນ, ການຂະຫຍາຍຜົນຜະລິດສາລີໄດ້ເຮັດໃຫ້ລາຍໄດ້ເປັນເງິນສົດເພີ່ມຂຶ້ນ ແລະ ເປັນໂອກາດໃນການຮຽກຮ້ອງເອົາທີ່ດິນໃໝ່; ຊາວບ້ານພຽງແຕ່ສາມາດໝາຍເອົາດິນຕອນໜຶ່ງທີ່ເປັນຊັບສິນສ່ວນລວມຢູ່ນອກເຂດອະນຸລັກທີ່ໄດ້ຮັບອະນຸຍາດຈາກອຳນາດການປົກຄອງທ້ອງຖິ່ນເພື່ອປູກສາລີ. ການປູກສາລີນຳໃຊ້ແຮງງານໜ້ອຍກວ່າການປູກເຂົ້າ; ມັນສາມາດປູກໄດ້ໃນເນື້ອທີ່ດິນທີ່ບໍ່ເໝາະສົມສຳລັບການປູກເຂົ້າ. (Kallio ແລະ ຄະນະຊຽວຊານ, 2019).

**ຮູບທີ 6.10 ລາຄາສາລີທີ່ຊື້ຂາຍປະຈຳວັນຂອງສາກົນ: ວັນທີ 3 ມັງກອນ 2005 – 16 ພະຈິກ 2020**




*ໝາຍເຫດ: ໃນຕົວເລກ ໝາຍຈ້ຳ ແມ່ນ ຈຸດຂອງເລກເສດ*

310. **ການຜະລິດສາລີໃນ ສປປ ລາວ ເພີ່ມຂຶ້ນສູງສຸດໃນປີ 2016 ພາຍຫຼັງທີ່ລາຄາຕົກຕ່ຳໃນປີ 2012.** ລາຄາສາກົນທີ່ຕົກຕ່ຳລົງແມ່ນເລີ່ມຢູ່ໄຕມາດທີ 3 ໃນທ້າຍ ຂອງປີ 2012 ຫຼັງຈາກໄດ້ບັນລຸເຖິງຈຸດສູງສຸດ ຄື 300 ໂດລາຕໍ່ໂຕນ. ຫຼັງຈາກຫຼຸດລົງຕ່ຳກວ່າ 270 ໂດລາຕໍ່ໂຕນເລັກນ້ອຍ ໃນກາງປີ 2013, ການຫຼຸດລົງໃນຈັງຫວະໄວກ່ອນທີ່ຈະລົງມາຮອດຈຸດທີ່ຕ່ຳກວ່າ $ 130 ຕໍ່ໂຕນໃນໄຕມາດທີ 3 ຂອງປີ 2014. ມັນມີການປ່ຽນແປງຕ່ຳມາຕໍ່າກວ່າ $ 180 ຕໍ່ໂຕນນັບຕັ້ງແຕ່ (ຮູບ 2), ໂດຍສະເລ່ຍຢູ່ທີ່ $ 145 ຕໍ່ໂຕນ ລະ ຫວ່າງຕອນນັ້ນຫາເດືອນພະຈິກ 2020, ກ່ອນທີ່ຈະເພີ່ມຂຶ້ນເປັນຫຼາຍກວ່າ 300 ໂດລາໃນເດືອນພຶດສະພາ 2021 ແລະນັບຕັ້ງແຕ່ນັ້ນກໍຫຼຸດລົງເປັນປະມານ 250 ໂດລາ. ນອກຈາກລາຄາຕົກໃນປີ 2012 ທີ່ຜ່ານມາ ເຊິ່ງເຮັດໃຫ້ເກີດການຫລຸດເນື້ອທີ່ປູກສາລີແລ້ວ, ຊາວກະສິກອນຍັງປະສົບກັບບັນຫາຜະລິດຕະພາບສາລີໄດ້ຫຼຸດລົງ ຫຼັງຈາກການປູກພືດຊະນິດດຽວ ຄືສາລີ 2 ຫາ 3 ລະດູ ຍ້ອນວ່າຄຸນນະພາບດິນມີການເສື່ອມໂຊມລົງ (Kallio ແລະ ຄະນະຊ່ວຍຊານ (2019) ເຊິ່ງຈຳແນກໃຫ້ເຫັນໄດ້ຈາກການສຳພາດຊາວກະສິກອນຕົວຢ່າງໃນສາມບ້ານໃນແຂວງຫົວພັນ).

311. **ການສົ່ງເສີມການປູກສາລີ ແບບພືດຊະນິດດຽວ ແມ່ນເພີ່ມຄວາມບອບບາງ ແລະ ເປັນອັນຕະລາຍຕໍ່ສິ່ງແວດລ້ອມ.** ການເອື່ອຍອີງຫລາຍເກີນໄປໃສການຂະຫຍາຍສາລີຢ່າງໄວວາ (ຫຼື ການປູກພືດຊະນິດດຽວໃດກໍ່ຕາມ), ເຊິ່ງທຳຄວາມເສື່ອມເສຍແກ່ພືດພັນທີ່ເຄີຍຜະລິດມາແບບເປັນມູນເຊື້ອ ທີ່ເຄີຍສະໜອງຄວາມໝັ້ນຄົງດ້ານການດຳລົງຊີວິດຂອງຊາວບ້ານໃນຊົນນະບົດມາຫຼາຍລຸ້ນຄົນ, ຈະເຮັດໃຫ້ຄື້ນຫມົດໄປ ແລະ ເຮັດໃຫ້ຊາວສວນຂະໜາດນ້ອຍປະສົບກັບຂໍ້ເສຍຂອງຄວາມສ່ຽງອັນໃຫຍ່ຫຼວງ ເມື່ອເກີດສະພາບລາຄາ ຫຼືຜົນຜະລິດຫຼຸດລົງ. ການໃຫ້ຜົນຜະລິດສູງ ແລະ ການເຂົ້າເຖິງຕະຫຼາດການສົ່ງອອກໄດ້ກະຕຸ້ນໃຫ້ເຈົ້າໜ້າທີ່ມີຄວາມກະຕືລືລົ້ນໃນການຫຼຸດຜ່ອນຄວາມທຸກຍາກໂດຍຜ່ານເສັ້ນທາງການເຕີບໂຕສີຂຽວທີ່ໄດ້ຮັບຮອງເອົາຢ່າງເປັນທາງການເພື່ອຊຸກຍູ້ການຂະຫຍາຍຕົວຂອງສາລີ, ໂດຍສະເພາະໃນເຂດທີ່ມີເນື້ອທີ່ດິນສຳລັບເພື່ອເຮັດໄຮ່ ຫຼື ບໍ່ເໝາະສົມກັບການປູກເຂົ້າ. ເຖິງວ່າເຈົ້າໜ້າທີ່ໄດ້ມີມາດຕະການຕ່າງໆເພື່ອຫຼຸດ ຜ່ອນພຶດຕິກຳການປູກເຂົ້າໄຮ່, ເຊິ່ງເປັນຄວາມພະຍາຍາມເພື່ອຫຼຸດຜ່ອນການຕັດໄມ້ທຳລາຍປ່າກໍ່ຕາມ, ແຕ່ການຂະຫຍາຍການປູກສາລີກໍໄດ້ຊຸກຍູ້ການເຮັດໄຮ່ປູກເຂົ້າໂດຍມີການຜັກດັນການຖາງໄຮ່ເຂົ້າໄປສູ່ເຂດປ່າທີ່ຫ່າງໄກຫຼາຍກວ່າເກົ່າເຊິ່ງໄດ້ກໍ່ໃຫ້ເກີດການຕັດໄມ້ທຳລາຍປ່າຫຼາຍຂຶ້ນຕື່ມອີກ. ອາຫານປະຈຳວັນຂອງຊາວບ້ານແມ່ນເຂົ້າ ແລະ ເນື້ອທີ່ປູກເຂົ້ານາແມ່ນຍັງມີຈຳກັດ ຫຼື ບໍ່ມີເລີຍ (ວົງວິສຸກ ແລະ ຄະນະຊ່ວຍຊານ, 2016).

## ຮູບທີ 6.11 ເນື້ອທີ່ເກັບກູ້ ແລະ ສະມັດຖະພາບການຜະລິດສາລີ ຂອງ ສປປ ລາວ: 2009-18




Data source: https://laosis.lsb.gov.la/ (accessed 1 September 2020).

*ໝາຍເຫດ: ທ່ອນສີຟ້າແມ່ນ ເນື້ອທີ່ເກັບກູ້ (ຮຕ), ເສັ້ນສີສົ້ມ ແມ່ນ ສະມັດຖະພາບ(ໂຕນ/ຮຕ)*

312. **ຄວາມຕ້ອງການໃນການປູກແຕ່ງຢູ່ພາຍໃນທີ່ມີຈຳກັດ ແລະ ການເໜັງຕີງຂອງລາຄາສາກົນເປັນການຈຳກັດທ່າແຮງການຂະຫຍາຍການຜະລິດສາລີໃນ ສປປ ລາວ.** ຊາວກະສິກອນຂະໜາດນ້ອຍ, ໂດຍສະເພາະແມ່ນຜູ້ທີ່ກູ້ຢືມເງິນສຳລັບການປູກໃຫມ່ຫຼືການຂະຫຍາຍການປູກທີ່ມີແລ້ວ ແມ່ນມີຄວາມສ່ຽງຕໍ່ການເຫນັງຕີງຂອງລາຄາເປັນພິເສດ. ເມື່ອບໍ່ມີບ່ອນເກັບມ້ຽນທີ່ທັນສະໄໝ ແລະ ບໍ່ມີພໍ່ຄ້າມາເກັບຊື້ຢູ່ພາຍໃນປະເທດເພື່ອຜະລິດອາຫານສັດຫຼືປຸງແຕ່ງເປັນອາຫານ, ຊາວສວນສາລີຂອງ ສປປ ລາວ ແມ່ນຈະປະສົບກັບຄວາມສ່ຽງຂອງການຜັນຜວນຂອງຕະຫຼາດສາກົນ.

313. **ການເພີ່ມລະດັບການສຶກສາ ຂອງຊາວກະສິກອນຂະໜາດນ້ອຍເຮັດໃຫ້ຜົນຜະລິດ ຂອງຟາມການປູກຝັງລ້ຽງສັດເພີ່ມຂຶ້ນ.** ການປູກຝັງລ້ຽງສັດໂດຍມີສັນຍາຜູກພັນສອງສົ້ນກັບຊາວກະສິກອນຂະໜາດນ້ອຍຈະເຮັດໃຫ້ມີການຖ່າຍທອດຄວາມຮູ້ດ້ານວິຊາການ ແລະ ຊຸກຍູ້ການຜະລິດ ຢ່າງມີປະສິດທິຜົນ (Chaovannapoonphol, Y. ແລະ Somyana, W. 2018). ການສຶກສາເປັນຂົງເຂດທີ່ສຳຄັນທີ່ ລັດຖະບານມີເຫດຜົນທີ່ຈະເຂົ້າມາປັບປຸງແກ້ໄຂ; ການສຶກສາຮຽນຮູ້ຢ່າງເປັນທາງການຈະເພີ່ມຜະລິດຕະພາບໃນອະນາຄົດ. ແນວໃດກໍດີ, ສຳລັບຊາວກະສິກອນໃນລຸ້ນປັດຈຸບັນ, ການສຶກສາຮຽນຮູ້ທີ່ບໍ່ເປັນທາງການຜ່ານການເຮັດກະສິກຳແບບສັນຍາຜູກພັນສອງສົ້ນກໍ່ແມ່ນສາມາດເຮັດໃຫ້ມີຜົນໄດ້ຮັບ.

314. **ສາລີເປັນວັດຖຸປະກອບຮັບໃຊ້ທີ່ຕື່ມເຕັມໃຫ້ຂະແໜງລ້ຽງສັດ.** ດັ່ງນັ້ນ, ການສົ່ງເສີມການຜະລິດອາ ຫານສັດຈາກການນຳໃຊ້ສາລີທີ່ຜະລິດພາຍໃນປະເທດແມ່ນສົມເຫດສົມຜົນ. ນອກຈາກອາຫານລ້ຽງສັດແລ້ວ, ໂຄງການສົ່ງເສີມການເພີ່ມສາລີເຂົ້າໃນລາຍການອາຫານຂອງຄົວເຮືອນ ແລະ ຮ້ານອາຫານ ແລະ ສົ່ງເສີມອາຫານວ່າງທີ່ເຮັດດ້ວຍສາລີຈະຊ່ວຍເພີ່ມການບໍລິໂພກສາລີພາຍໃນປະເທດ. ນອກເຫນືອຈາກການໄດ້ຮັບການຊ່ວຍເຫຼືອຈາກໂຮງຮຽນສອນເຮັດອາຫານ ເພື່ອບັນຈຸເອົາສາລີໃນຫຼັກສູດຂອງພວກເຂົາ, ສິ່ງນີ້ຍັງຈະຕ້ອງມີໂຄງການເພີ່ມຕື່ມ ເພື່ອສົ່ງເສີມພໍ່ຄົວທີ່ມີລະດັບການຖືກຍອມຮັບ ເພື່ອສ້າງວິທີການບໍລິໂພກສາລີ.

315. **ມີຊ່ອງວ່າງຫຼາຍລະຫວ່າງລາຄາສົ່ງອອກ ແລະ ນຳເຂົ້າສາລີ.** ສປປ ລາວ ໄດ້ນຳເຂົ້າສາລີຈຳນວນໜຶ່ງໃນແຕ່ລະປີ. ແນວໃດກໍ່ຕາມ, ເຖິງວ່າສາລີທີ່ຜະລິດຢູ່ພາຍໃນປະເທດມີລາຄາຕໍ່າກວ່າສາລີທີ່ນຳເຂົ້າຢ່າງຫຼວງຫຼາຍ, ສາລີຕ່າງປະເທດທີ່ມີລາຄາແພງກໍ່ຍັງມີນຳເຂົ້າເປັນປົກກະຕິຢູ່ (ຮູບ 6.12).

## ຮູບທີ 6.12 ລາຄາສິ່ງອອກ ຕໍ່ກັບ ລາຄານຳເຂົ້າສາລີ ຂອງ ສປປ ລາວ




Data source: FAOS, http://www.fao.org/faostat/en/#data (accessed 1 Sep. 2020)

*ໝາຍເຫດ: ທ່ອນສີຟ້າແມ່ນລາຄາສິ່ງອອກ, ທ່ອນສີສົ້ມແມ່ນ ລາຄານຳເຂົ້າ. ໃນຕົວເລກ, ໝາຍຈຸດ ຄືຫົວໜ່ວຍພັນ*

### 6.3.6 ພືດໃຫ້ນ້ຳມັນ: ຖົ່ວດິນ, ໝາກງາ, ຖົ່ວເຫລືອງ

316. **ຖົ່ວດິນ, ໝາກງາ ແລະ ຖົ່ວເຫລືອງເປັນພືດທີ່ໄດ້ຮັບການສົ່ງເສີມຈາກລັດຖະບານເພື່ອໃຫ້ຊາວສວນຂະໜາດນ້ອຍປູກໃຫ້ເປັນສິນຄ້າ.** ປັດຈຸບັນ, ການຜະລິດຖົ່ວດິນໄດ້ຫັນໄປທຸກໆພາກເໜືອເປັນສວນໃຫຍ່ແລະ ສວນໃຫຍ່ຖົ່ວດິນແມ່ນປູກໃນດິນຕອນນ້ອຍໆ. ງາເກືອບທັງໝົດແມ່ນປູກສະເພາະແຕ່ຢູ່ພາກເໜືອ, ກວມເອົາ 98% ຂອງຜົນຜະລິດທັງໝົດທົ່ວປະເທດໃນປີ 2009, ໂດຍແມ່ນແຂວງຫຼວງພະບາງເປັນຜູ້ຜະລິດລາຍໃຫຍ່ທີ່ສຸດ, ກວມເອົາ 71,6% ຂອງຜົນຜະລິດທັງໝົດທົ່ວປະເທດ (JICA, 2012).[46] ຕະຫຼາດສົ່ງອອກໝາກງາຕົ້ນຕໍລວມມີ: ຫວຽດນາມ, ຈີນ, ໄທ (JICA, 2012). ການຜະລິດຖົ່ວດິນ, ຫມາກງາ ແລະຖົ່ວເຫຼືອງໄດ້ເພີ່ມຂຶ້ນຢ່າງໄວວານັບຕັ້ງແຕ່ປີ 2009. ຮູບ 6.13 ແລະ 6.14 ສະແດງໃຫ້ເຫັນທ່າອ່ຽງໃນຕະຫລອດໄລຍະທົດສະວັດທີ່ຜ່ານມາ.

317. **ການປູກພືດໃຫ້ນ້ຳມັນ ແລະ ຜະລິດຕະພັນທີ່ເປັນຜົນພອຍໄດ້ແມ່ນແຫຼ່ງໂປຼຕີນທີ່ສົມບູນ, ອາຫານສັດທີ່ດີເລີດ ແລະ ເປັນສ່ວນປະກອບຂອງອາຫານສັດທີ່ຜະລິດໃນໂຮງງານ.** ປັດຈຸບັນ, ສປປ ລາວ ໄດ້ນຳເຂົ້ານ້ຳມັນພືດເປັນສ່ວນໃຫຍ່ ເພື່ອບໍລິໂພກພາຍໃນ. ຄວາມຕ້ອງການນ້ຳມັນທີ່ໃຊ້ປຸງແຕ່ງອາຫານຢູ່ພາຍໃນຂອງ ສປປ ລາວ ຍັງບໍ່ມີການຂະຫຍາຍຕົວເພີ່ມຂຶ້ນທາງດ້ານປະລິມານ ແລະ ຄວາມຫຼາກຫຼາຍ. ໃນຂະນະທີ່ອົງການ FAO ລາຍງານວ່າ ສປປ ລາວ ນຳເຂົ້າ 11,8 ລ້ານໂດລາ ໃນປີ 2018, ຕົວເລກຕົວຈິງອາດຈະເພີ່ມຂຶ້ນ 5-10 ເທົ່າ ເນື່ອງຈາກນ້ຳມັນພືດສ່ວນຫຼາຍແມ່ນນຳເຂົ້າບໍ່ເປັນທາງການ.

46. ໃນຂະນະທີ່ JICA (2012) ໄດ້ລາຍງານວ່າຜົນຜະລິດລວມທັງປະເທດຂອງໝາກງາໃນປີ 2009 ເທົ່າກັບ 14.745 ໂຕນ, FAO ພັດໄດ້ລາຍງານວ່າ ແມ່ນ 8.250 ໂຕນ.

**ຮູບທີ 6.13 ການຜະລິດພືດໃຫ້ນ້ຳມັນໃນ ສປປ ລາວ: 2009-18**




*ໝາຍເຫດ: ໃນຕົວເລກ, ຈຸດ ໝາຍເຖິງຈ້ຳເມັດຂອງຫົວໜ່ວຍພັນ*

**ຮູບທີ 6.14 ການຜະລິດພືດໃຫ້ນ້ຳມັນແຍກຕາມປະເພດ: 2009-18**




*ໝາຍເຫດ: ທ່ອນສີຟ້າແມ່ນຖົ່ວດິນ, ທ່ອນສີສົ້ມແມ່ນໝາກງາ, ທ່ອນສີເທົາແມ່ນຖົ່ວເຫລືອງ. ໃນຕົວເລກ, ຈຸດໝາຍເຖິງຈ້ຳເມັດຂອງຫົວໜ່ວຍພັນ.*

## ຮູບທີ 6.15 ລາຄາຂອງສາກົນຂອງຖົ່ວດິນ ແລະ ຖົ່ວເຫລືອງ & ນ້ຳມັນພືດ 2009-2020




*ໝາຍເຫດ: ເສັ້ນສີຟ້າແມ່ນຖົ່ວດິນ, ເສັ້ນສີສົ້ມແມ່ນນ້ຳມັນຖົ່ວດິນ, ເສັ້ນສີເທົາແມ່ນຖົ່ວເຫລືອງ, ເສັ້ນສີເຫລືອງນ້ຳມັນຖົ່ວເຫລືອງ.*

318. **ສະມັດຖະພາບການຜະລິດຂອງເມັດພືດນ້ຳມັນໄດ້ເພີ່ມຂຶ້ນໃນທົດສະວັດທີ່ຜ່ານມາ.** ຜົນຜະລິດຕໍ່ເຮັກຕາໄດ້ເພີ່ມຂຶ້ນສຳລັບພືດໃຫ້ນ້ຳມັນທັງ 3 ປະເພດ, ເຊິ່ງໝາກງາມີຈຳນວນເພີ່ມຂຶ້ນສູງສຸດ, ຮອງລົງມາແມ່ນຖົ່ວດິນແລະຖົ່ວເຫຼືອງ. ໃນທົດສະວັດທີ່ສິ້ນສຸດປີ 2018, ສະມັດຖະພາບການຜະລິດໝາກງາໄດ້ເພີ່ມຂຶ້ນ 66% (0,75 ໂຕນ/ເຮັກຕາ ເປັນ 1,25 ໂຕນ/ເຮັກຕາ), ຖົ່ວດິນເພີ່ມຂຶ້ນຫຼາຍກວ່າໜຶ່ງສ່ວນສາມຂອງ 35 (11,66..%) (1,8 ໂຕນ/ເຮັກຕາ ເປັນ 2,44 ໂຕນ/ເຮັກຕາ) ແລະ ຖົ່ວເຫຼືອງ 15,2% (1,54 ໂຕນ/ເຮັກຕາ ຫາ 1,77 ໂຕນ/ເຮັກຕາ).[47] ໃນປີ 2018, ຜົນຜະລິດໝາກງາ ແລະ ຖົ່ວດິນ ຂອງ ສປປ ລາວ ແມ່ນຂ້ອນຂ້າງສູງເມື່ອທຽບໃສ່ກັບຄ່າສະເລ່ຍຂອງໂລກ ເຊິ່ງມີແຕ່ 0,8 ໂຕນ/ເຮັກຕາ ສຳລັບໝາກງາ ແລະ 1,75 ໂຕນ/ເຮັກຕາ ສຳລັບຖົ່ວດິນ. ສະມັດຖະພາບການຜະລິດຖົ່ວເຫຼືອງ ຂອງ ສປປ ລາວ ກໍ່ແມ່ນສູງກວ່າຄ່າສະເລ່ຍຂອງໂລກເລັກນ້ອຍ ຄື 1,79 ໂຕນ/ເຮັກຕາ. ປະເທດຜູ້ຜະລິດອັນດັບຕົ້ນໆ ຂອງໂລກບັນລຸໄດ້ຫຼາຍກວ່າ 3 ໂຕນຕໍ່ເຮັກຕາຄື: ປະເທດບຣາຊິນ, 3,39 ໂຕນ/ເຮັກຕາ; ອາເມຣິກາ, 3.47 ໂຕນ/ເຮັກຕາ.

319. **ຂໍ້ຈຳກັດໃນລະດັບຟາມລວມມີການນຳໃຊ້ແນວພັນທີ່ບໍ່ດີ ແລະ ບັນດາສິ່ງທ້າທາຍດ້ານຄຸນນະພາບ.** ການສ້າງຄວາມເຂັ້ມແຂງໃຫ້ການສົ່ງເສີມກະສິກຳເພື່ອໃຫ້ຄຳແນະນຳດ້ານວິຊາການແບບລົງມືເຮັດໃຫ້ເບິ່ງຕົວຈິງຈະສາມາດປັບປຸງສະມັດຖະພາບການຜະລິດຂອງພືດນ້ຳມັນ. ຖົ່ວດິນທີ່ສົ່ງອອກຈາກ ສປປລາວ ໄປ ໄທ ແມ່ນລະດັບຊັ້ນຄຸນນະພາບ ແລະ ປະເພດປະສົມ/ຕ່ຳ ແລະ ລາຄາຖົ່ວດິນສົ່ງອອກ ຂອງ ສປປ ລາວ ແມ່ນປະມານເຄິ່ງໜຶ່ງຂອງລາຄາຖົ່ວດິນທີ່ມາຈາກມຽນມາ, ຈີນ ແລະ ຫວຽດນາມ (ກະຊວງກະສິກຳ ແລະ ປ່າໄມ້, 2014). ຖົ່ວເຫຼືອງຍັງມີບັນຫາດ້ານຄຸນນະພາບເຮັດໃຫ້ລາຄາຕ່ຳລົງ. ຊາວກະສິກອນລາວປູກໝາກງາຊາວເມັດນ້ອຍ ຂາຍໃນລາຄາຕ່ຳກວ່າໝາກງາດຳເມັດໃຫຍ່. ການຫັນປ່ຽນໄປປູກໝາກງາດຳ ແລະ ສົ່ງອອກໄປປະເທດຍີ່ປຸ່ນ (ລວມທັງຄ່າຂົນສົ່ງຈາກຫຼວງພະບາງ ຫາ ໂຢໂກຮາມາ ຜ່ານບາງກອກ) ສາມາດສ້າງລາຍຮັບເພີ່ມຂຶ້ນລະຫວ່າງ 27 ຫາ 52 ສ່ວນຮ້ອຍ ສຳລັບງາດຳຊັ້ນສອງ ແລະ ງາດຳຊັ້ນໜຶ່ງ ຕາມລຳດັບ.

47. ຖ້າສົມທຽບລະຫວ່າງຄ່າສະເລ່ຍ 5 ປີທຳອິດ (2009 - 2013) ແລະຄ່າສະເລ່ຍ 5 ປີທີສອງ (2014 - 18), ເພື່ອອະທິບາຍເຖິງການເໜັງຕີງທາງດ້ານລະດູການ ຫຼື ຜົນກະທົບຂອງດິນຟ້າອາກາດ, ໝາກງາ ໄດ້ເພີ່ມຂຶ້ນ 26,3 ສ່ວນຮ້ອຍ, ຖົ່ວດິນ ໄດ້ເພີ່ມຂຶ້ນ 21,6 ສ່ວນຮ້ອຍ ແລະ ຖົ່ວເຫຼືອງ ກໍ່ໄດ້ເພີ່ມຂຶ້ນ 6,7 ສ່ວນຮ້ອຍ.

## ຮູບທີ 6.16 ສະມັດຖະພາບການຜະລິດຂອງພືດໃຫ້ນ້ຳມັນ: 2009-18




Data source: http://www.fao.org/faostat/en/#data (accessed 1 Sept. 2020).

*ໝາຍເຫດ: ທ່ອນສີຟ້າ ແມ່ນຖົ່ວດິນ, ທ່ອນສີສົ້ມ ແມ່ນ ໝາກງາ, ທ່ອນສີເທົາ ແມ່ນຖົ່ວເຫລືອງ. ໃນຕົວເລກ,ຈ້ຳເມັດໝາຍເຖິງ ຈຸດ ຂອງເລກເສດ.*

320. **ການຜະລິດຖົ່ວດິນໃນ ສປປ ລາວ ມີຄວາມອ່ອນໄຫວສູງຕໍ່ກັບລາຄາທີ່ຊື້ຂາຍລະຫວ່າງປະເທດ.** ຜົນຜະລິດຕົ້ນຕໍແມ່ນເພື່ອສົ່ງອອກ: ດິບ, ສົດ ແລະ ແຫ້ງ. ສປປ ລາວ ບໍ່ມີການປຸງແຕ່ງຖົ່ວດິນ, ຖົ່ວເຫຼືອງ ຫຼື ເມັດງາ ໃນລະດັບອຸດສາຫະກຳທີ່ສາມາດຮັບມືກັບການກະທົບກະແທກຈາກຕະຫຼາດພາຍນອກ. ດັ່ງນັ້ນ, ການຜະລິດຖົ່ວດິນແມ່ນຜະເຊີນກັບການເໜັງຕີງຂຶ້ນລົງຂອງລາຄາຕະຫຼາດສາກົນ. ຍ້ອນບໍ່ມີການປຸງແຕ່ງຢູ່ພາຍໃນປະເທດ, ເມື່ອໃດລາຄາ ທີ່ຊື້ຂາຍກັນລະຫວ່າງປະເທດ ຫາກຕົກຕໍ່າລົງແບບກະທັນຫັນກໍ່ຈະສະທ້ອນໄປຮອດຊາວກະສິກອນທັນທີ.

321. **ການເຂົ້າເຖິງການສົ່ງເສີມກະສິກຳທີ່ມີພື້ນຖານທາງດ້ານວິຊາການ ແລະ ຂໍ້ມູນຂ່າວສານລາຄາຕະຫຼາດທາງອອນລາຍ.** ການຊ່ວຍເຫຼືອຊາວກະສິກອນຂະໜາດນ້ອຍໃຫ້ຜະລິດຜະລິດຕະພັນທີ່ມີຂັ້ນຄຸນນະພາບສູງຂຶ້ນແມ່ນໜ້າທີ່ບູລິມະສິດອັນໜຶ່ງ. ວິທີການທີ່ເປັນໄປໄດ້ລວມມີການໃຫ້ນັກລົງທຶນ / ພໍ່ຄ້າເປັນຜູ້ສະໜອງແນວພັນປັບປຸງ ແລະ ໃຫ້ຄຳແນະນຳດ້ານວິຊາການພາຍໃຕ້ ການຜະລິດກະສິກຳແບບສັນຍາຜູກພັນສອງສົ້ນ. ນອກຈາກນີ້ຍັງມີຄວາມຈຳເປັນສຳລັບຜູ້ເກັບຮວບຮວມໃນການປັບປຸງຄຸນນະພາບຂອງການຄັດແຍກຂະໜາດ ແລະ ການຈັດຊັ້ນຄຸນນະພາບຕາມທີ່ໄດ້ກຳນົດ. ອີກວິທີໜຶ່ງແມ່ນການຊຸກຍູ້ຊາວກະສິກອນທີ່ນຳໜ້າ ທີ່ອາດສາມາດເຮັດສັນຍາກັບຊາວສວນຂະໜາດນ້ອຍ ເພື່ອເກັບຊື້ຜົນຜະລິດ ຂອງເຂົາເຈົ້າໂດຍແລກກັບການຈັດຫາທຶນໃຫ້ ເພື່ອຊື້ວັດຖຸປະກອນຮັບໃຊ້ການຜະລິດ ແລະ ການໃຫ້ຄຳແນະນຳດ້ານວິຊາການ.

# ບົດທີ 7 ການທ່ອງທ່ຽວ

## 7.1 ເປີດຫົວເລື່ອງ

322. **ການທ່ອງທ່ຽວໄດ້ມີການຂະຫຍາຍຕົວຢ່າງຫຼວງຫຼາຍ ນັບຕັ້ງແຕ່ປີ 2012 ແລະເປັນອຸດສາຫະກໍາທີ່ໃຫຍ່ທີ່ສຸດອັນດັບສີ່ຂອງ ສປປ ລາວ.** ບົດລາຍງານໃນບໍ່ດົນມານີ້ຄາດຄະເນວ່າການທ່ອງທ່ຽວປະກອບ ສ່ວນໂດຍກົງເຖິງ 4,6% ເຂົ້າໃນ GDP ແລະມີການຈ້າງງານເຖິງ 54,000 ຄົນ.[48] ມັນເປັນໜຶ່ງໃນບັນດາບູລິມະສິດຂອງແຜນພັດທະນາເສດຖະກິດສັງຄົມແຫ່ງຊາດ ຄັ້ງທີ 9 (2021-2025) ແລະ ໃນປີ 2019, ສປປ ລາວ ໄດ້ຮັບຮອງເອົາຍຸດທະສາດການເຕີບໂຕສີຂຽວແຫ່ງຊາດ ທີ່ໃຫ້ບູລິມະສິດດ້ານການທ່ອງທ່ຽວແບບທໍາມະຊາດ.

323. **ການທ່ອງທ່ຽວມີບົດບາດສໍາຄັນ ໃນການເສີມສ້າງຄວາມເຂັ້ມແຂງໃຫ້ເສດຖະກິດແຫ່ງຊາດ.** ມັນເປັນພາກສ່ວນທີ່ສໍາຄັນຂອງຂະແໜງການທີ່ບໍ່ແມ່ນຊັບພະຍາກອນ ແລະ ສະໜັບສະໜູນເສດຖະກິດເພື່ອ ໃຫ້ມີແຫຼ່ງການເຕີບໂຕທີ່ຫຼາກຫຼາຍ ນອກເໜືອໄປຈາກພະລັງງານໄຟ ຟ້ານໍ້າຕົກ ແລະ ການຂຸດຄົ້ນບໍ່ແຮ່. ນອກຈາກການເດີນທາງທາງອາກາດ, ທີ່ພັກ, ຮ້ານອາຫານ, ການປະກອບການຈັດລາຍການນໍາທ່ຽວ ຫຼື ການຂົນສົ່ງທາງບົກ, ການທ່ອງທ່ຽວມີການເຊື່ອມຕໍ່ຢ່າງແຂງແຮງກັບຂະແໜງການອື່ນໆ, ຈັດຫາຕະ ຫຼາດໃຫ້ແກ່ຜະລິດຕະພັນກະສິກໍາ; ສ້າງວຽກເຮັດງານທໍາຫຼາຍຢ່າງໃຫ້ຜູ້ຮຽນຈົບໂຮງຮຽນ ໂດຍສະເພາະແມ່ຍິງ; ເປັນຕົວກະຕຸ້ນການລົງທຶນຂອງລັດ ແລະເອກະຊົນເພີ່ມເຕີມເຂົ້າໃນການສ້າງເສັ້ນທາງ, ທ່າເຮືອ, ສະໜາມບິນ ແລະ ພື້ນຖານໂຄງລ່າງອື່ນໆທີ່ນໍາໃຊ້ໂດຍນັກທ່ອງທ່ຽວ ແລະປະຊາກອນທ້ອງຖິ່ນເພື່ອເຂົ້າເຖິງການບໍລິການ ແລະຕະຫຼາດ; ແລະສ້າງຖານລາຍຮັບອາກອນ ແລະຄ່າທໍານຽມດ້ານການເງິນໃຫ້ແກ່ການບົວລະບັດຮັກສາພື້ນຖານໂຄງລ່າງ ແລະອຸດໜູນການບໍລິການດ້ານສິ່ງແວດລ້ອມ.

324. **ໃນໄລຍະ 1990 ຫາ 2015 ຈໍານວນນັກທ່ອງທ່ຽວໄດ້ເພີ່ມຂຶ້ນໃນແຕ່ລະປີ.** ນັບແຕ່ປີ 2016 ເປັນຕົ້ນມາ, ທ່າອ່ຽງແມ່ນບໍ່ສະໝໍ່າສະເໝີປານໃດ ແຕ່ໃນປີ 2019, ນັກທ່ອງທ່ຽວມາຈາກຈີນໄດ້ເພີ່ມຂຶ້ນຢ່າງວ່ອງໄວ ຄື ເພີ່ມຂຶ້ນ 14,4% ຈາກປີ 2018 ເພື່ອບັນລຸ ຈຸດສູງສຸດກວ່າທຸກໆໄລຍະ ຄືເຖິງ 4,79 ລ້ານເທື່ອຄົນ.[49] ແນວໃດກໍ່ຕາມ, ເມື່ອວິເຄາະຂໍ້ມູນຕາມໄລຍະເວລາພັກເຊົາ ແລະ ການໃຊ້ຈ່າຍ ເຫັນວ່າຍັງມີຊ່ອງທາງຂອນຂ້າງຫຼາຍທີ່ຈະເພີ່ມລາຍຮັບຈາກການທ່ອງທ່ຽວ.

325. **ເຖິງວ່າຈະມີການເສື່ອມຖອຍຈາກການແຜ່ລະບາດຂອງພະຍາດໂຄວິດ-19, ການທ່ອງທ່ຽວມີທ່າ ແຮງທີ່ຈະຟື້ນຕົວ ແລະ ປະກອບສ່ວນຢ່າງຫຼວງຫຼາຍເຂົ້າໃນການຫຼຸດຜ່ອນຄວາມທຸກຍາກ.** ມີໂອກາດສ້າງວຽກເຮັດງານທໍາ ແລະ ລາຍໄດ້ແບບຍືນຍົງ, ໃນຂະນະທີ່ວັດທະນະທໍາ ແລະ ສິ່ງແວດລ້ອມຂອງລາວກໍ່ ໜ້າເຄົາລົບນັບຖື. ເຖິງຢ່າງໃດກໍຕາມ, ການຂະຫຍາຍຕົວຂອງຂະແໜງການດັ່ງກ່າວ ແມ່ນຖືກກີດຂວາງຈາກຫຼາຍປັດໃຈ ເຊັ່ນ ການທີ່ເບິ່ງບໍ່ເຫັນ ຫລື ເປັນທີ່ຮູ້ຈັກກັນວ່າເປັນຈຸດໝາຍປາຍທາງ ຂອງ ການ ທ່ອງທ່ຽວສາກົນ, ຊ່ອງວ່າງດ້ານພື້ນຖານໂຄງລ່າງ, ການປະກອບຊັບພະຍາກອນມະນຸດໃຫ້ແບບບໍ່ພຽງພໍ, ສະ ພາບແວດລ້ອມທີ່ມີສິ່ງທ້າທາຍທາງດ້ານທຸລະກິດ ແລະ ການສື່ສານລະຫວ່າງພາກລັດ ແລະ ເອກະຊົນທີ່ຍັງອ່ອນແອ.

326. **ສິ່ງທ້າທາຍທີ່ຜະເຊີນໜ້າຂະແໜງການທ່ອງທ່ຽວທີ່ໄດ້ກໍານົດໃນບົດ DTIS ປີ 2012 ຍັງມີຄົງຢູ່.** ເຖິງວ່າໄດ້ມີຄວາມຄືບໜ້າ, ແຕ່ຢ່າງໃດກໍ່ຕາມ, ຂໍ້ຈໍາກັດທີ່ໄດ້ຍົກຂຶ້ນມາກ່ອນໜ້ານີ້ ກໍ່ຍັງຄົງຢູ່ ແລະ ຂໍ້ສະເໜີແນະຕ່າງໆກໍ່ຍັງບໍ່ໄດ້ຖືກຈັດຕັ້ງປະຕິບັດຢ່າງເຕັມສ່ວນ. ການປັບປຸງບົດ DTIS ໃນປີ 2020 ໄດ້ສະຫລຸບສັງລວມຄືນຄວາມຄືບໜ້າຂອງການພັດທະນາຕັ້ງແຕ່ປີ 2012 ເປັນຕົ້ນມາ, ພ້ອມທັງກໍານົດບັນດາສິ່ງທ້າທາຍທີ່ຂະແໜງການພວມປະສົບຢູ່ ແລະ ສະເໜີແນະກ່ຽວກັບບັນດາມາດຕະການແກ້ໄຂທີ່ເປັນບູລິ ມະສິດເພື່ອຍົກສູງຄວາມສາມາດໃນການແຂ່ງຂັນ ແລະ ຄວາມສາມາດຟື້ນຕົວຄືນສູ່ສະພາບເດີມ ຂອງອຸດສາຫະກໍາການທ່ອງທ່ຽວ.

### ກ່ອງເນື້ອຄວາມ 7.1 ຂໍ້ສະເໜີແນະດ້ານຄວາມສາມາດແຂ່ງຂັນ ສໍາລັບຂະແໜງທ່ອງທ່ຽວ ໃນບົດ DTIS 2012

- ປັບປຸງຄວາມຖືກຕ້ອງຂອງຂໍ້ມູນ, ປັບປຸງວິທີການເກັບກໍາຂໍ້ມູນເພື່ອຄິດໄລ່ການປະກອບສ່ວນຂອງການທ່ອງທ່ຽວໃນເສດຖະກິດລາວໃຫ້ດີຂຶ້ນ. ບົດລາຍງານໄດ້ຍົກບັນຫາທີ່ໜັກໜ່ວງກ່ຽວກັບຄຸນນະພາບ ແລະ ຄວາມຄົບຖ້ວນສົມບູນຂອງຂໍ້ມູນການທ່ອງທ່ຽວ. ຖານຂໍ້ມູນເສດຖະກິດທີ່ຖືກຕ້ອງ ແລະຄົບຖ້ວນແມ່ນຈໍາເປັນເພື່ອແຈ້ງໃຫ້ຜູ້ຕັດສິນໃຈທາງດ້ານການ ເມືອງຊາບ ແລະ ເພື່ອໃຫ້ພວກເພິ່ນເພີ່ມປະສິດທິພາບຂອງການຈັດຕັ້ງປະຕິບັດນະໂຍບາຍ. ຂໍ້ສະເໜີແນະນີ້ຍັງຄົງເປັນບູລິມະສິດ.

- ສ້າງຕັ້ງສະພາການຕະຫຼາດການທ່ອງທ່ຽວລາວ (LTMB). LTMB ມີຈຸດປະສົງເພື່ອລວມເອົາພາກລັດ ແລະ ບໍລິສັດເອກະຊົນ ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ການເປັນຄູ່ຮ່ວມພາກລັດ ແລະ ເອກະຊົນ, ຮັບປະກັນຄວາມເປັນເຈົ້າການ ແລະ ຄໍາໝັ້ນສັນຍາຂອງພາກລັດ ແລະ ພາກເອກະຊົນຢ່າງມີຜົນຕໍ່ຍຸດທະສາດການທ່ອງທ່ຽວ ແລະ ເພື່ອໂຄສະນາໃຫ້ໂລກຮູ້ວ່າລາວກໍ່ແມ່ນຈຸດໝາຍປາຍທາງຂອງການທ່ອງທ່ຽວສາກົນ. ເຖິງວ່າຈະໄດ້ມີການຈັດກອງປະຊຸມຈໍານວນໜຶ່ງໃນເບື້ອງຕົ້ນ, ແຕ່ໜ້າເສຍດາຍທີ່ LTMB ບໍ່ເຄີຍຖືກສ້າງຕັ້ງຂຶ້ນເລີຍ. ການ

48. ຂໍ້ສະຫລຸບຂອງ ADB ເລກທີ 141 ມິຖຸນາ 2020
49. ບົດລາຍງານສະຖິຕິການທ່ອງທ່ຽວໃນລາວ ປີ 2019 ຂອງ ກະຊວງ MOICT

ສ້າງສະພາດັ່ງກ່າວຍັງເປັນສິ່ງຈຳເປັນເພື່ອສ້າງຕັ້ງການເປັນຄູ່ຮ່ວມລະຫວ່າງພາກລັດ / ເອກະຊົນທີ່ມີປະສິດທິຜົນສຳລັບການຕະຫຼາດ ແລະ ການສົ່ງເສີມການທ່ອງທ່ຽວ. ໃນປີ 2020 ໄດ້ມີການຕົກລົງສ້າງອົງກອນທີ່ຄ້າຍຄືກັນຂຶ້ນໃໝ່ ແລະ ປັດຈຸບັນແມ່ນລໍຖ້າການອະນຸມັດຢ່າງເປັນທາງການ.

- ເສີມຂະຫຍາຍການປະສານງານລະຫວ່າງຂະແໜງການ. ເນື່ອງຈາກລັກສະນະທີ່ຫຼາກຫຼາຍຂອງອຸດສາຫະກຳການທ່ອງທ່ຽວລະຫວ່າງປະເທດ ແລະການມີສ່ວນຮ່ວມຂອງຫຼາຍອົງການຂອງລັດຖະບານໃນການວາງແຜນການພັດທະນາຂະແໜງການ, ບົດສຶກສາໄດ້ສະເໜີແນະໃຫ້ເປີດຕົວ "ການຝຶກອົບຮົມເພື່ອສ້າງຂີດຄວາມສາມາດດ້ານບຸກຄະລາກອນ ແລະ ອົງກອນເພື່ອການພັດທະນາການທ່ອງທ່ຽວແບບຍືນຍົງ" ແນໃສ່ປັບປຸງຄວາມເຂົ້າໃຈຂອງເຈົ້າໜ້າທີ່ໃນອຸດສາຫະກຳການທ່ອງທ່ຽວ ແລະ ເພີ່ມທະວີການຮ່ວມມືລະຫວ່າງກະຊວງອົງການສາຍຕັ້ງຕ່າງໆ ຂອງລັດຖະບານ ແລະ ລະຫວ່າງຂັ້ນສູນກາງ ແລະ ແຂວງ. ທັງໆທີ່ສິ່ງນີ້ເປັນບູລິມະສິດຂອງ NSEDP, ແຕ່ການປະສານງານລະຫວ່າງອົງການທີ່ບໍ່ແຂງແຮງ ແລະ ການຂາດຄວາມເຂົ້າໃຈຮ່ວມກັນລະຫວ່າງບັນດາອົງການຂອງລັດຖະບານແມ່ນໄດ້ຂັດຂວາງການຈັດຕັ້ງປະຕິບັດໃຫ້ເກີດຜົນ.
- ທົບທວນຄືນບັນດາກົດໝາຍ, ດຳລັດ, ກົດລະບຽບ ແລະ ລະບຽບການຕ່າງໆກ່ຽວກັບການທ່ອງທ່ຽວທີ່ມີຢູ່ແລ້ວ. ພາກສ່ວນກ່ຽວຂ້ອງຫຼາຍພາກສ່ວນທີ່ໄດ້ໃຫ້ສຳພາດຕໍ່ບົດລາຍງານສະບັບນີ້ ໄດ້ແບ່ງປັນຄວາມບໍ່ພໍໃຈຂອງເຂົາເຈົ້າ ແລະ ສະເໜີໃຫ້ມີການເຮັດໃຫ້ຂັ້ນຕອນການດຳເນີນງານມີຄວາມລຽບງ່າຍ ແລະ ໃຫ້ກົດລະບຽບສອດຄ່ອງກັບກົດໝາຍອື່ນໆທີ່ສົ່ງເສີມວິສາ ທະກິດ ແລະ ການລົງທຶນ.

## 7.2 ຂະແໜງການທ່ອງທ່ຽວໃນ ສປປ ລາວ

### 7.2.1 ພາບລວມຂອງຕະຫລາດສຳລັບການທ່ອງທ່ຽວ

327. **ກ່ອນການແຜ່ລະບາດຂອງພະຍາດໂຄວິດ-19 ຂະແໜງການທ່ອງທ່ຽວໄດ້ຂະຫຍາຍຕົວຢ່າງໄວວາໃນທົ່ວໂລກເປັນເວລາຫຼາຍປີ ແລະ ພາກພື້ນອາຊີ-ປາຊີຟິກ ໄດ້ມີການຂະຫຍາຍຕົວຢ່າງແຂງແຮງທີ່ສຸດທາງດ້ານການທ່ອງທ່ຽວ ແລະ ການເຂົ້າມາທ່ຽວຊົມ ຂອງນັກທ່ອງທ່ຽວຕ່າງປະເທດ.** ໃນປີ 2019 ນັກທ່ອງທ່ຽວໄດ້ເຂົ້າມາຍັງສປປ ລາວ ສູງສຸດເຖິງ 4,79 ລ້ານຄົນ, ເພີ່ມຂຶ້ນ 14,4% ເມື່ອທຽບໃສ່ປີ 2018.[50] ຄາດວ່າປີ 2019 ມີນັກທ່ອງທ່ຽວພາຍໃນປະເທດ 2,35 ລ້ານຄົນຕໍ່ 2,8 ລ້ານຄົນໃນປີ 2018. ໃນປີ 2019 ອົງການທ່ອງທ່ຽວໂລກຂອງສະຫະປະຊາຊາດ (UNWTO) ຄາດວ່າຈຳນວນນັກທ່ອງທ່ຽວທີ່ເຂົ້າມາໃນພາກພື້ນອາຊີແລະປາຊີຟິກຈະເພີ່ມຂຶ້ນ 5-6 ສ່ວນຮ້ອຍໃນປີ 2020. ເນື່ອງຈາກການລະບາດຂອງພະຍາດໂຄວິດ-19, ນັກທ່ອງທ່ຽວທີ່ເຂົ້າມາທ່ອງທ່ຽວໄດ້ຕົກຕ່ຳລົງໃນປີ 2020, ໂດຍ UNWTO ລາຍງານວ່າໃນໄຕມາດທຳອິດຫຼຸດລົງ 22 ສ່ວນຮ້ອຍເມື່ອທຽບໃສ່ໄລຍະດຽວກັນຂອງປີ 2019.

328. **ຫຼາຍກວ່າ 90 ສ່ວນຮ້ອຍ ຂອງນັກທ່ອງທ່ຽວທີ່ເຂົ້າມາທັງໝົດແມ່ນມາຈາກອາຊີ-ປາຊີຟິກ.** ໃນປີ 2019, ຫຼາຍກວ່າ 94 ສ່ວນຮ້ອຍຂອງນັກທ່ອງທ່ຽວທັງໝົດແມ່ນມາຈາກອາຊີ-ປາຊີຟິກ ແລະ ສອງສ່ວນສາມແມ່ນມາຈາກອາຊຽນ. ເກືອບທັງໝົດ ຂອງຜູ້ມາທ່ຽວຊົມແລະຢ້ຽມຢາມຈາກອາຊຽນຖືວ່າແມ່ນມາຈາກໄທ ແລະ ຫວຽດນາມ ; ໃນນັ້ນ, ສ່ວນຫຼາຍແມ່ນຜູ້ມາທ່ຽວຊົມແລະຢ້ຽມຢາມໄລຍະສັ້ນເພື່ອທຸລະກິດ, ເພື່ອຊື້ສິນຄ້າຕາມເຂດຊາຍແດນ ແລະ ເພື່ອອອກແຮງງານຕາມລະດູການ. ສ່ວນຜູ້ມາທ່ຽວ ແລະ ຢ້ຽມຢາມຈາກໄທໄດ້ຫຼຸດລົງຈາກ 63% ໃນປີ 2012 ເປັນ 45% ໃນປີ 2019 ຍ້ອນນັກທ່ອງທ່ຽວຈາກຈີນແລະປະເທດອື່ນໆໄດ້ເພີ່ມຂຶ້ນ. ນັກທ່ອງທ່ຽວຈາກເອີຣົບແລະອາເມລິກາເໜືອລວມເອົາພຽງແຕ່ 5,5 ສ່ວນຮ້ອຍຂອງຈຳນວນນັກທ່ອງທ່ຽວແລະຜູ້ເຂົ້າມາຢ້ຽມຢາມທັງໝົດໃນປີ 2019.[51]

329. **ນັກທ່ອງທ່ຽວຈາກປະເທດຈີນໄດ້ເພີ່ມຂຶ້ນຢ່າງໄວວາລວມເອົາຫຼາຍກວ່າ 20 ສ່ວນຮ້ອຍໃນປີ 2019.** ຈີນເປັນຕະຫຼາດຕົ້ນທາງທີ່ໃຫຍ່ທີ່ສຸດແລະເຕີບໂຕໄວທີ່ສຸດໂດຍມີຈຳນວນນັກທ່ອງທ່ຽວເພີ່ມຂຶ້ນສອງເທົ່າລະຫວ່າງປີ 2015 ຫາ 2019. ໃນປີ 2009 ຈຳນວນນັກທ່ອງທ່ຽວຈີນເກືອບເທົ່າກັບຈຳນວນ ຊາວເອີຣົບ (125.000). ຮອດປີ 2015 ມີນັກທ່ອງທ່ຽວຈີນຫຼາຍກວ່າຈຳນວນຜູ້ເດີນທາງຊາວເອີຣົບ 2,5 ເທົ່າ ແລະໃນປີ 2019 ໄດ້ເພີ່ມຂຶ້ນເປັນ 6 ເທົ່າ.[52] ນັກທ່ອງທ່ຽວຈີນສ່ວນຫຼາຍເດີນທາງມາໂດຍລົດຈາກແຂວງຢຸນນານທາງພາກໃຕ້ຂອງຈີນ (ເອີ້ນວ່າ "ການທ່ອງທ່ຽວແບບຄາລາວານ"). ອັດຕາສ່ວນຂອງຊາວເອີຣົບແລະອາເມຣິກາເໜືອໄດ້ຫຼຸດລົງເລັກນ້ອຍຈາກ 5,6 ສ່ວນຮ້ອຍໃນປີ 2013 ເປັນ 3,8 ສ່ວນຮ້ອຍໃນປີ 2019 ແລະ 2,3 ສ່ວນຮ້ອຍເປັນ 1,7 ສ່ວນຮ້ອຍຕາມລຳດັບ. ມີນັກທ່ອງທ່ຽວຈຳນວນໜ້ອຍຫຼາຍຈາກອາຟຣິກາຫຼືຕາເວັນອອກກາງ.

50. ບົດລາຍງານສະຖິຕິການທ່ອງທ່ຽວໃນລາວ ປີ 2019 ຂອງ ກະຊວງ MOICT
51. ເລື່ອງດຽວກັນ
52. ເລື່ອງດຽວກັນ

## ຮູບທີ 7.1 ບັນດາຕະຫລາດການທ່ອງທ່ຽວທີ່ສຳຄັນ ແຍກຕາມປະເທດຕົ້ນທາງ ໃນປີ 2013 ແລະ 2019




*ແຫລ່ງຂໍ້ມູນ: ບົດລາຍງານສະຖິຕິການທ່ອງທ່ຽວ ໃນລາວ ຂອງກະຊວງ MOICT ໃນປີ 2019*

*ໝາຍເຫດ: ປ່ຽງສີຟ້າແກ່ແມ່ນ ໄທ, ສີສົ້ມແມ່ນ ຫວຽດນາມ, ສີເທົາແມ່ນ ຈີນ, ສີຟ້າອ່ອນແມ່ນ ເອີຣົບບວກອະເມລິກາ, ສີເຫລືອງແມ່ນ ເກົາຫລີ ແລະ ສີຂຽວແມ່ນ ອື່ນໆ.*

330. **ການເປີດສາຍທາງລົດໄຟໃນເດືອນທັນວາ 2021 ຈະຊຸກຍູ້ໃຫ້ນັກທ່ອງທ່ຽວຈີນເພີ່ມຂຶ້ນເມື່ອໃດທາງການມີການຍົກເລີກຂໍ້ຈຳກັດດ້ານການເດີນທາງ ຍ້ອນການລະບາດ ຂອງ ພະຍາດໂຄວິດ-19.** ໂດຍລວມແລ້ວ, ນັກທ່ອງທ່ຽວທີ່ເຂົ້າມາຈາກພາກພື້ນ ເປັນຕົ້ນ ໄທ, ຫວຽດນາມ ແລະ ຈີນ ກວມເອົາ 85,7% ຂອງຈຳນວນນັກທ່ອງທ່ຽວທັງໝົດໃນປີ 2019. ນອກຈາກຈີນແລ້ວ, ສ.ເກົາຫຼີ ຍັງເປັນຕະຫຼາດໃຫຍ່ທີ່ສຸດຂອງລາວໃນອາຊີ-ປາຊີຟິກ ຄືມີເຖິງ 203.191 ຄົນ ໃນປີ 2019.[53]

331. **ຈຳນວນນັກທ່ອງທ່ຽວຂາເຂົ້າທີ່ມາຕາມສາຍການບິນ ມີພຽງ 14 ສ່ວນຮ້ອຍຂອງຜູ້ມາຢ້ຽມຢາມແລະທ່ອງທ່ຽວ, ຕົ້ນຕໍແມ່ນຜ່ານສະໜາມບິນວຽງຈັນ ແລະ ຫຼວງພະບາງ.** ນັກທ່ອງທ່ຽວສ່ວນໃຫຍ່ (86 ສ່ວນຮ້ອຍ) ເຂົ້າມາໂດຍຜ່ານຊາຍແດນທາງບົກ. ສ່ວນໃຫຍ່ຈະເຂົ້າມາຈາກໄທ ທີ່ນະຄອນຫຼວງວຽງຈັນ ຫຼື ສະຫວັນນະເຂດ, ໂດຍນຳໃຊ້ຂົວມິດຕະພາບ 1 ແລະ 2 ແລະຈາກຈີນທີ່ຫຼວງນ້ຳທາຜ່ານດ່ານຊາຍແດນບໍ່ເຕັນ.

332. **ຫຼາຍກວ່າ 75 ສ່ວນຮ້ອຍຂອງນັກທ່ອງທ່ຽວ ແມ່ນການທ່ອງທ່ຽວທີ່ມາຈາກພາກພື້ນ.** ຢ່າງໃດກໍ່ຕາມ, ຕົວເລກເຫຼົ່ານີ້ຄວນຈະມີການຕີຄວາມໝາຍໄປຄຽງຄູ່ກັບຂໍ້ມູນກ່ຽວກັບໄລຍະເວລາພັກເຊົາແລະຈຳນວນເງິນທີ່ໃຊ້ຈ່າຍ. ມີຄວາມແຕກຕ່າງກັນຫຼາຍລະຫວ່າງນັກທ່ອງທ່ຽວຈາກພາກພື້ນ ແລະ ຈາກສາກົນ ເມື່ອເບິ່ງຄ່າສະເລ່ຍຂອງໄລຍະເວລາພັກເຊົາ ແລະ ການໃຊ້ຈ່າຍໃນປະເທດ. ໃນປີ 2019, ນັກທ່ອງທ່ຽວຕ່າງປະເທດໄດ້ພັກເຊົາໂດຍສະເລ່ຍ 7,9 ມື້ໃນປະເທດ ແລະ ເຖິງແມ່ນວ່າພວກເຂົາກວມເອົາພຽງແຕ່ 13,2 ສ່ວນຮ້ອຍຂອງຈຳນວນນັກທ່ອງທ່ຽວທັງໝົດ, ແຕ່ພວກເຂົາກວມເອົາ 38 ສ່ວນຮ້ອຍຂອງຈຳນວນນັກທ່ອງທ່ຽວທັງໝົດໄລ່ເປັນເທື່ອຄືນວັນ (ຈຳນວນນັກທ່ອງທ່ຽວຂາເຂົ້າຄູນໃຫ້ກັບໄລຍະເວລາສະເລ່ຍ ຂອງການພັກເຊົາ) ແລະ ກວມ 50 ສ່ວນຮ້ອຍ ຂອງລາຍຈ່າຍທັງໝົດ. ນັກທ່ອງທ່ຽວສາກົນໃຊ້ຈ່າຍສະເລ່ຍ 84 ໂດລາຕໍ່ມື້.

333. **ຜູ້ມາຢ້ຽມຢາມ ແລະ ທ່ອງທ່ຽວຈາກພາກພື້ນສ່ວນໃຫຍ່ເດີນທາງມາຊື້ເຄື່ອງຫຼື ມາຢ້ຽມຢາມໝູ່ເພື່ອນແລະຍາດພີ່ນ້ອງແລະພັກເຊົາໂດຍສະເລ່ຍສອງຄືນ.** ນັກທ່ອງທ່ຽວໄທໄດ້ໃຊ້ຈ່າຍສະເລ່ຍ 46 ໂດລາສະຫະລັດຕໍ່ວັນໃນປີ 2019. ຊາວຫວຽດນາມ 30 ໂດລາສະຫະລັດຕໍ່ວັນ, ຊາວກຳປູເຈຍ 29 ໂດລາສະຫະລັດຕໍ່ວັນ, ຊາວມຽນມາ 23 ໂດລາສະຫະລັດຕໍ່ວັນ. ນັກທ່ອງທ່ຽວຈີນກໍ່ພັກເຊົາເປັນເວລາສັ້ນ, ໂດຍສະເລ່ຍ 2,67 ວັນໃນປະເທດ, ເຖິງຢ່າງໃດກໍຕາມ, ການໃຊ້ຈ່າຍສະເລ່ຍຂອງເຂົາເຈົ້າແມ່ນສູງກວ່າຄືຢູ່ທີ່ 76 ໂດລາຕໍ່ມື້.

334. **ນັກທ່ອງທ່ຽວສາກົນແມ່ນຕະຫຼາດທີ່ໃຫຍ່ທີ່ສຸດກ່ອນການລະບາດຂອງ ໂຄວິດ-19, ກວມເອົາ 50 ສ່ວນຮ້ອຍ ຂອງລາຍຈ່າຍຄາດຄະເນທັງໝົດ.** ນັກທ່ອງທ່ຽວທີ່ມາຈາກພາກພື້ນ ເຊັ່ນຈາກຈີນໄດ້ກາຍມາມີຄວາມສຳຄັນນັບມື້ຫຼາຍຂຶ້ນ. ເມື່ອຄວາມຕ້ອງການຂອງສາກົນຫຼຸດລົງ, ການຟື້ນຟູ ແລະ ເພີ່ມຄວາມຕ້ອງ ການຈາກຈີນຈະເປັນຈຸດໃຈກາງໃນການຟື້ນຟູຂະແໜງການທ່ອງທ່ຽວ ຂອງລາວ. ຈີນກວມເອົາ 21,4 ສ່ວນຮ້ອຍຂອງນັກທ່ອງທ່ຽວທັງໝົດ ແລະ 22 ສ່ວນຮ້ອຍຂອງລາຍຈ່າຍທີ່ຄາດຄະເນໃນປີ 2019, ເມື່ອທຽບກັບພຽງແຕ່ 6,5 ສ່ວນຮ້ອຍຂອງນັກທ່ອງທ່ຽວ ແລະ 4 ສ່ວນຮ້ອຍຂອງລາຍຈ່າຍໃນປີ 2013 (ເບິ່ງຮູບ 7.2 ແລະ 7.3).

53. ເລື່ອງດຽວກັນ

## ຮູບທີ 7.2 ນັກທ່ອງທ່ຽວຈາກຈີນ, 2013-2019




ໝາຍເຫດ: ໃນຕົວເລກ ຈຸດ ແມ່ນ ຈໍ້າ ຂອງຫົວໜ່ວຍພັນ.

335. **ຄ່າໃຊ້ຈ່າຍສະເລ່ຍຕໍ່ນັກທ່ອງທ່ຽວໃນລາວແມ່ນຕໍ່າກວ່າປະເທດເພື່ອນບ້ານຢ່າງຫຼວງຫຼາຍ.** ໃນປີ 2019, ລາຍຈ່າຍສະເລຍແມ່ນພຽງ 0,40 ໂດລາໃນລາວຕໍ່ທຸກໆໂດລາທີ່ໃຊ້ຈ່າຍຢູ່ກໍາປູເຈຍ, 0,20 ໂດລາສະຫະລັດໃນເມື່ອທຽບໃສ່ຈາຍຢູ່ ໄທ ແລະ ມີພຽງ 0,15 ໂດລາ ເມື່ອທຽບໃສ່ຈາຍຢູ່ຫວຽດນາມ.[54] ການເພີ່ມທະວີປະສິດທິພາບການຂອງນັກທອງທຽວໂດຍຜ່ານການປັບປຸງພື້ນຖານໂຄງລາງການທອງທຽວ ແລະ ການບໍລິການທີ່ມີມູນຄາເພີ່ມມີທ່າແຮງ ທີ່ຈະເຮັດໃຫ້ເກີດການເຕີບໂຕທີ່ວອງໄວ.

## ຮູບທີ 7.3 ຄ່າໃຊ້ຈ່າຍສະເລ່ຍຕໍ່ນັກທ່ອງທ່ຽວ, 2019




ໝາຍເຫດ:*ກໍາປູເຈຍ: ຂໍ້ມູນ 2018. ແຫຼ່ງຂ່າວ: MOICT ບົດລາຍງານສຸະຖິຕິການທ່ອງທ່ຽວລາວ 2019), ສະຖິຕິຂອງອົງການການທອງທຽວໄທ ປີ 2019, ບົດລາຍງານສະຖິຕິຂອງກະຊວງທອງທຽວ 2018, ສໍານັກງານການທອງທຽວແຫງຊາດຫວຽດນາມ: ບົດລາຍງານປະຈໍາປີ 2019 ຂອງການທອງທຽວຫວຽດນາມ

54. ກະຊວງ MOICT ສປປ ລາວ, ອົງການທ່ອງທ່ຽວໄທ, ກະຊວງທ່ອງທ່ຽວກໍາປູເຈຍ, ສໍານັກງານການທ່ອງທ່ຽວແຫ່ງຊາດຫວຽດນາມ

## ຮູບທີ 7.4 ບັນດາປະເທດຕົ້ນທາງໃຫຍ່ສຸດ ແຍກຕາມຄ່າໃຊ້ຈ່າຍຂອງນັກທ່ອງທ່ຽວ 2019




*ແຫລ່ງຂໍ້ມູນ: ບົດລາຍງານສະຖິຕິດ້ານການທ່ອງທ່ຽວໃນລາວ ປີ 2019 ຂອງກະຊວງ MOICT*

*ໝາຍເຫດ: ຊື່ປະເທດແຕ່ອັນດັບ 1 ຫາ 10 (ເທິງລົງລຸ່ມ) ມີ ໄທ, ຈີນ, ເກົາຫລີໃຕ້, ຫວຽດນາມ, ສະຫະລັດ, ຝຣັ່ງ, ຍີ່ປຸ່ນ, ສະຫະລາດຊະອະນາຈັກ, ເຢຍລະມັນ, ອົດສະຕຣາລີ. ຕົວເລກຊ້າຍມືແມ່ນຈຳນວນນັກທ່ອງທ່ຽວເຂົ້າມາປະເທດ, ຂວາມືແມ່ນມູນຄ່າການໃຊ້ຈ່າຍ ຂອງນັກທ່ອງທ່ຽວ.*

### 7.2.2 ການປະກອບສ່ວນຂອງການທ່ອງທ່ຽວເຂົ້າໃນລວມຍອດຜະລິດຕະພັນພາຍໃນ ແລະ ການຈ້າງງານ

336. **ການທ່ອງທ່ຽວໃນລາວກວມເອົາ 4,6 ສ່ວນຮ້ອຍຂອງການປະກອບສ່ວນໂດຍກົງເຂົ້າໃນລວມຍອດຜະລິດຕະພັນພາຍໃນໃນປີ 2015.** ມັນໄດ້ສ້າງວຽກເຮັດງານທຳ 122.900 ຕຳແໜ່ງ, ໃນນັ້ນ ຜູ້ຍິງກວມ 50 ສ່ວນຮ້ອຍ[55]. ໃນປີ 2019, ການທ່ອງທ່ຽວສ້າງລາຍໄດ້ເຖິງ 934,7 ລ້ານໂດລາສະຫະລັດ, ກວມ 13,7% ຂອງການສົ່ງອອກທັງໝົດ. ສິ່ງດັ່ງກ່າວເຮັດໃຫ້ການທ່ອງທ່ຽວມີການປະກອບສ່ວນທີ່ໃຫຍ່ເປັນອັນດັບ 3 ເຂົ້າໃນລາຍຮັບການສົ່ງອອກ, ຖັດຈາກບໍ່ແຮ່ ແລະ ພະລັງງານໄຟຟ້າ (ໄຟຟ້ານໍ້າຕົກ)[56].

| |
|---|
| ໝາຍເຫດ: ມີຊ່ອງວ່າງທີ່ສຳຄັນຢູ່ໃນຕົວເລກໂດຍຂຶ້ນກັບແຫຼ່ງຂໍ້ມູນເຊັ່ນຕົວຢ່າງກ່ຽວກັບສ່ວນແບ່ງການ ທ່ອງທ່ຽວໃນ GDP ຫຼືຈຳນວນການຈ້າງງານໃນຂະແໜງການ. ພາກສ່ວນກ່ຽວຂ້ອງກໍ່ມັກຈະເນັ້ນໃຫ້ເຫັນກ່ຽວກັບຄວາມບໍ່ຖືກຕ້ອງຂອງຂໍ້ມູນ ແລະວິທີການເກັບກຳຂໍ້ມູນ. ການຂາດຂໍ້ມູນທີ່ເຊື່ອຖືໄດ້ສຳລັບການຄິດໄລ່**ການປະກອບສ່ວນຂອງການທ່ອງທ່ຽວໃນເສດຖະກິດຂອງລາວ**ໄດ້ຖືກຍົກຂຶ້ນມາໂດຍຜູ້ມີສ່ວນຮ່ວມສ່ວນໃຫຍ່ທີ່ໄດ້ໃຫ້ສຳພາດໃນລະຫວ່າງການສຶກສາ. |

### 7.2.3 ຄຸນລັກສະນະຂອງຂະແໜງການທ່ອງທ່ຽວເອກະຊົນ

337. **ຢູ່ສປປ ລາວ ມີຜູ້ປະກອບດ້ານການທ່ອງທ່ຽວ ຊອງລະດັບພາກພື້ນຈຳນວນໜ້ອຍທີ່ຈັດລາຍການທົວ ແລະ ມີຫຼາຍກວ່າ 500 ບໍລິສັດນຳທ່ຽວ/ຕົວແທນສຳນັກງານທ່ອງທ່ຽວຂະໜາດນ້ອຍທີ່ເປັນຂອງພາຍໃນ.** ມີຜູ້ປະກອບການດ້ານການທ່ອງທ່ຽວຊາເຂົ້າຈາກພາກພື້ນທີ່ເຄື່ອນໄຫວຢູ່ ປະມານ 15 ລາຍ ແລະ ຜູ້ປະກອບການສະເພາະຂອງລາວຈຳນວນໜຶ່ງທີ່ເຮັດໜ້າທີ່ເປັນບໍລິສັດຄຸ້ມຄອງຢູ່ປາຍທາງ, ຊຶ່ງໝາຍເຖິງເຂົາເຈົ້າຮັບຜິດຊອບໃນການຄຸ້ມຄອງການດຳເນີນລາຍການນຳທ່ອງ. ສຳນັກງານທ່ອງທ່ຽວຂອງພາກພື້ນບາງແຫ່ງກໍ່ມີພຽງແຕ່ຫ້ອງການປະຕິບັດງານຢູ່ໃນ ສປປ ລາວເພື່ອກຳກັບນັກທ່ອງທ່ຽວຊາເຂົ້າຂອງຕົນ ແລະ ການຕະຫຼາດ ແລະ ການຄຸ້ມຄອງແມ່ນດຳເນີນການຈາກສຳນັກງານໃຫຍ່ທີ່ຕັ້ງຢູ່ບາງກອກ, ຮາໂນ້ຍ, ຫຼືນະຄອນໂຮ່ຈິມິນ. ກ່ອນໂຄວິດ-19, ສປປ ລາວ ມີບໍລິສັດນຳທ່ຽວຂະໜາດນ້ອຍຂອງທ້ອງຖິ່ນຫຼາຍແຫ່ງ ໂດຍສ່ວນໃຫຍ່ແມ່ນຢູ່ແຂວງຫຼວງພະບາງ, ວຽງຈັນ ແລະ ປາກເຊ, ເຊິ່ງໄດ້ເນັ້ນໃສ່ສຳລັບລູກຄ້າທີ່ເຂົ້າມາຫາແບບບໍ່ໄດ້ນັດໝາຍ. ຈຳນວນເຫຼົ່ານີ້ມັກຈະເປັນທຸລະກິດຄອບຄົວທີ່ຈ້າງພະນັກງານແຕ່ 1 ຫາ 4 ຄົນ ແລະສ່ວນຫຼາຍແມ່ນຂາຍຕໍ່ລາຍການນຳທ່ຽວໄປກັບໃນວັນດຽວ ແລະ ຂາຍຕໍ່ປີ້ລົດເມ ຫຼື ປີ້ຍົນ. ໃນປີ 2019 ມີຕົວແທນທ່ອງທ່ຽວລາວທີ່ໄດ້ຂຶ້ນທະບຽນ 539 ຕົວແທນ (ແລະ ເພີ່ມຂຶ້ນ 46 ສ່ວນຮ້ອຍ ທຽບໃສ່ປີ 2015).[56]

338. **ທີ່ພັກ ແລະ ຮ້ານອາຫານ**: ໃນປີ 2019 ທົ່ວປະເທດມີທີ່ພັກຢ່າງເປັນທາງການ 2.920 ແຫ່ງ (ໂຮງແຮມ 637 ແຫ່ງ ແລະ ເຮືອນພັກ 2.283 ແຫ່ງ ແລະ ຣີສອດ) ແລະ ມີ 55.541 ຫ້ອງ, ເຊິ່ງເພີ່ມຂຶ້ນ 20,4 ສ່ວນຮ້ອຍ ທຽບໃສ່ຈຳນວນທີ່ພັກໃນປີ 2014. ນະຄອນຫຼວງວຽງຈັນໄດ້ຮັບທັງນັກທ່ອງທ່ຽວ ແລະ ລູກຄ້າທີ່ເຮັດທຸລະກິດ, ຈຶ່ງຖືວ່າມີຄວາມໜາແໜ້ນສູງ

54. MOICT (2019)
55. MOICT (2019)
56. MOICT (2019)

ທີ່ສຸດ, ຕິດຕາມມາດ້ວຍຫຼວງພະບາງ, ເຊິ່ງແມ່ນສະຖານທີ່ທ່ອງທ່ຽວທີ່ມີຊື່ສຽງຫຼາຍທີ່ສຸດ; ແຂວງວຽງຈັນ (ລວມມີວັງວຽງ) ແລະ ຈຳປາສັກ. ອັດຕາການພັກອາໄສທົ່ວປະເທດໃນປີ 2019 ຄາດຄະເນຢູ່ທີ່ 54 ສ່ວນຮ້ອຍ, ອັດຕາການພັກອາໄສທີ່ສູງທີ່ສຸດແມ່ນແຂວງຫລວງພະບາງ (69 ສ່ວນຮ້ອຍ).[57]

339. **ຍີ່ຫໍ້ໂຮງແຮມລະດັບສາກົນທີ່ສຳຄັນໄດ້ເລີ່ມລົງທຶນໃນ ສປປ ລາວ.** ໃນຕົ້ນຊຸມປີ 2010, ບັນດາເຄືອຄ່າຍໂຮງແຮມຂອງສາກົນດັ່ງກ່າວຕັດສິນໃຈ ໄດ້ເຂົ້າມາລົງທຶນຢູ່ ສປປ ລາວ ເຊັ່ນ ຢູ່ ຫຼວງພະບາງ ແລະ ນະຄອນຫຼວງວຽງຈັນ, ແມ່ນຕົວຊີ້ວັດທາງບວກວ່າ ນັກລົງທຶນດ້ານສະຖານບໍລິການການຕ້ອນຮັບ ແລະ ການພັກຜ່ອນຂອງສາກົນທີ່ສຳຄັນໄດ້ກຳນົດເອົາ ສປປ ລາວ ເປັນໂອກາດແຫ່ງການເຕີບໂຕ. ພວກເຫຼົ່ານີ້ລວມມີກຸ່ມ ACCOR ແລະ IHG. ບັນດາບໍລິສັດຂອງຈີນກໍ່ໄດ້ລົງທຶນໃນອຸດສາຫະກຳສະຖານບໍລິການການຕ້ອນຮັບ (ເຊັ່ນ: ໂຮງແຮມ Qube ໃນວຽງຈັນ). ປັດຈຸບັນ, ສປປ ລາວ ມີໂຮງແຮມປະມານ 20 ແຫ່ງ, ເຊິ່ງແມ່ນໂຮງແຮມຍີ່ຫໍ້ລະດັບສາກົນເປັນຜູ້ຄຸ້ມຄອງ ຫຼື ເປັນເຈົ້າຂອງ.

340. ທີ່ພັກນັກທ່ອງທ່ຽວສ່ວນໃຫຍ່ແມ່ນມີຂະໜາດນ້ອຍ ແລະ ຄົນທ້ອງຖິ່ນເປັນເຈົ້າຂອງ ແລະ ຄຸ້ມຄອງ. ທີ່ພັກນັກທ່ອງທ່ຽວສ່ວນໃຫຍ່ຂອງ ສປປ ລາວ ປະກອບດ້ວຍໂຮງແຮມ, ເຮືອນພັກ ແລະ ຮ້ານອາຫານຂະໜາດນ້ອຍທີ່ຄົນທ້ອງຖິ່ນເປັນເຈົ້າຂອງ. ທີ່ພັກຕ່າງໆ ມີຈຳນວນຫ້ອງ ສະເລ່ຍ 19 ຫ້ອງຕໍ່ແຫ່ງ, ເຖິງວ່າຢູ່ນະຄອນຫຼວງວຽງຈັນ ຈະມີຂະໜາດໃຫຍ່ກວ່າ ໂດຍສະເລ່ຍ 31 ຫ້ອງຕໍ່ອາຄານທີ່ພັກ.

341. **ທຸລະກິດການທ່ອງທ່ຽວ/ສະຖານບໍລິການການຕ້ອນຮັບໃນ ສປປ ລາວ ໂດຍສະເລ່ຍ ມີພະນັກງານທັງໝົດ 15 ຄົນ (ສະຖິຕິປີ 2018).** ບໍລິສັດສ່ວນໃຫຍ່ມີຂະໜາດນ້ອຍ (ລູກຈ້າງ 6-20 ຄົນ) ຫຼື ຈຸນລະວິສາຫະກິດ (ຄົນເຮັດວຽກໜ້ອຍກວ່າ 6 ຄົນ). ໃນເວລາດຽວກັນ ບໍລິສັດຂະໜາດກາງ (ພະນັກງານ 21-100 ຄົນ), ຂະໜາດໃຫຍ່ (ພະນັກງານ 101-200 ຄົນ) ແລະ ບໍລິສັດຂະໜາດໃຫຍ່ກວ່ານັ້ນ (ພະນັກງານຫຼາຍກວ່າ 200) ກວມເອົາພຽງແຕ່ 19 ສ່ວນຮ້ອຍຂອງທຸລະກິດ, ບັນດາບໍລິສັດເຫລົ່ານີ້ ກວມເອົາ 60 ສ່ວນຮ້ອຍຂອງການຈ້າງງານທັງໝົດ.[58]

### 7.2.5 ການວິເຄາະຕະຫລາດຜູ້ມາຢ້ຽມຢາມ (ນັກທ່ອງທ່ຽວ)

342. **ຕະຫຼາດພາຍໃນຄາດວ່າຈະມີນັກທ່ອງທ່ຽວປະມານ 2,35 ລ້ານຄົນໃນປີ 2019.** ເກືອບ 90 ສ່ວນຮ້ອຍຂອງນັກທ່ອງທ່ຽວຕ່າງປະເທດທີ່ເຂົ້າມາ ສປປ ລາວ ແມ່ນເພື່ອການພັກຜ່ອນ, 4,6 ສ່ວນຮ້ອຍແມ່ນເພື່ອຈຸດປະສົງທຸລະກິດ ແລະ 2,1 ສ່ວນຮ້ອຍແມ່ນເປັນການຢ້ຽມຢາມຄອບຄົວ.[59] ຄວາມຕ້ອງການຕົ້ນຕໍສຳລັບນັກທ່ອງທ່ຽວຕ່າງປະເທດປະກອບມີ, ທຳມະຊາດ (55,9 ສ່ວນຮ້ອຍ), ການທ່ອງທ່ຽວປະຫວັດສາດ (54 ສ່ວນຮ້ອຍ), ວັດວາອາຮາມແລະອະນຸສາວະລີ (35,8 ສ່ວນຮ້ອຍ), ອາຫານ (29,2 ສ່ວນຮ້ອຍ), ແລະ ການຊື້ສິນຄ້າ (26,6 ສ່ວນຮ້ອຍ).[60] ຄວາມສົນໃຈອື່ນໆລວມມີ "ຈຸດໝາຍປາຍທາງໃໝ່", ການຜະຈົນໄພ, ການທ່ອງທ່ຽວນິເວດ, ຊົນເຜົ່າ. ຕະຫຼາດພາຍໃນປະເທດຂ້ອນຂ້າງສ້າງລາຍໄດ້ໜ້ອຍ, ສ່ວນໃຫຍ່ແມ່ນການໄປຢາມຄອບຄົວ.

343. **ຕະຫຼາດຫຼັກປະກອບມີການທ່ອງທ່ຽວພາຍໃນປະເທດ, ການທ່ອງທ່ຽວໃນປະເທດໃກ້ຄຽງ, ການ ທ່ອງທ່ຽວພາກພື້ນ ແລະ ການທ່ອງທ່ຽວທາງໄກ.**[61] ກອງເນື້ອຄວາມຂ້າງລຸ່ມນີ້ສະຫຼຸບຄຸນລັກສະນະທີ່ສຳຄັນຂອງສາມຕະຫຼາດການທ່ອງທ່ຽວສາກົນ.

344. **ການຈັດປະຊຸມພົບປະ, ການໃຫ້ຄ່າຕອບແທນໃນການເດີນທາງ, ການຈັດກອງປະຊຸມສຳມະນາ ແລະ ງານວາງສະແດງສິນຄ້າ (MICE) ເປັນຂົງເຂດໜຶ່ງທີ່ມີທ່າແຮງໃນການຂະຫຍາຍຕົວ.** ຕະຫຼາດ "ການຈັດປະຊຸມ"/"ຈັດເທດສະການ" (MICE) ເປັນການດຶງດູດກຸ່ມຕ່າງໆທີ່ມີຈຳນວນແຕ່ 40 ຫາ 200 ຄົນມາຮ່ວມກິດຈະກຳ. ມັນສາມາດເປັນ MICE ພາຍໃນປະເທດ (ບັນດາບໍລິສັດຂອງລາວ, ບັນດາກົມກອງ ຂອງລັດຖະບານ ແລະ INGO ແລະ ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ NGO ທີ່ມີກອງປະຊຸມ ແລະ ເທດສະການກໍ່ຄືກິດຈະກຳຕ່າງໆ) ຫຼື MICE ສາກົນ (ບໍລິສັດຂ້າມຊາດທີ່ຕັ້ງຢູ່ອາຊີ, ເອີຣົບ ຫຼື ອາເມຣິກາ, ກົມກອງຂອງລັດຖະບານປະເທດຕ່າງໆ). ສ່ວນໃຫຍ່ຈະພັກຢູ່ຫຼວງພະບາງ ຫຼື ວຽງຈັນ 2 ຫຼື 3 ຄືນ, ແລະ ປະສົມລາຍການປະຊຸມສຳມະນາ ຫຼື ການປະຊຸມພົບປະ ກັບການຢ້ຽມຢາມ ແລະ ກິດຈະກຳພິເສດສະເພາະ. ການບໍລິການນຳທ່ຽວສຳລັບຜູ້ເຂົ້າຮ່ວມ MICE ຕ້ອງການການບໍລິການທີ່ເປັນມືອາຊີບ ແລະ ມີປະສິດທິພາບ ແລະ ຊອກຫາຈຸດໝາຍປາຍທາງການຢ້ຽມຊົມທີ່ຮັບປະກັນ ແລະ ປອດໄພ ແລະ ທັງມີຫ້ອງປະຊຸມ ແລະ ຫ້ອງຮັບປະທານອາຫານຊັ້ນດີ/ຊັ້ນສູງ. ການໃຊ້ຈ່າຍປະຈຳວັນຂອງ MICE ຄາດຄະເນຕໍ່ຄົນຢູ່ລະຫວ່າງ $60 ຫາຫຼາຍກວ່າ $200. ບໍ່ມີສະຖິຕິຢ່າງເປັນທາງການກ່ຽວກັບຕະຫຼາດ MICE ແຕ່ເມື່ອໄດ້ມີການປັບປຸງທີ່ພັກອາໄສ, ພື້ນຖານໂຄງລ່າງ ແລະ ການເຊື່ອມຈອດຕ່າງໆທີ່ເປັນຢູ່ໃນປັດຈຸບັນ, ຕະຫລາດນີ້ສະແດງໃຫ້ເຫັນການຂະຫຍາຍຕົວທີ່ມີອະນາຄົດດີ. ພາບພົດການຕະຫລາດຂອງ ສປປ ລາວ ໃນຖານະທີ່ເປັນຈຸດໝາຍປາຍທາງແຫ່ງໃໝ່ທີ່ມີຄວາມສວຍງາມທາງທຳມະຊາດ ແລະ ລັກສະນະຂອງແທ້ທີ່ "ຍັງດີ ແລະ ບໍ່ທັນຖືກທຳລາຍ" ແມ່ນກົງກັບຄວາມມຸ່ງຫວັງຂອງຕະຫຼາດ MICE. MICE ມີຄວາມໄດ້ປຽບເພາະມີການດຳເນີນການໄປຕະຫຼອດປີ ເຊິ່ງເປັນການເພື່ອໄວ້ໃຫ້ມີການສົ່ງເສີມການຂາຍໃນໄລຍະລະດູການທີ່ຕ່ຳ (ບໍ່ແມ່ນລະດູທ່ອງທ່ຽວ). ນອກຈາກນັ້ນ, ບັນດາຜູ້ເຄື່ອນໄຫວຂອງພາກເອກະຊົນໃນຂະແໜງການ, ໂຮງແຮມ ແລະ ບໍລິສັດ DMC ກໍ່ໄດ້ຮ່ວມມືກັນເພື່ອສົ່ງເສີມ MICE ໃນລາວ ແລະ ໄດ້ເຜີຍແຜ່ "ຄູ່ມືການຈັດ MICE ຢູ່ປະເທດລາວ" ໃນປີ 2019 ແລະ 2020.

---

57. ຄຳສະຫລຸບ ຂອງ ADB (2020)
58 ການວິເຄາະຕ່ອງໂສ້ມູນຄ່າການທ່ອງທ່ຽວຢູ່ ສປປ ລາວ ຂອງ CBI, ມິຖຸນາ 2018.
59. ADB (2020)
60. MOICT (2019)
61. ADB/Swisscontact/MOICT ແຜນການຄຸ້ມຄອງຈຸດໝາຍປາຍທາງ(ການທ່ອງທ່ຽວ) ຂອງ ສປປ ລາວ 2016-2018.

## ກ່ອງເນື້ອຄວາມ 7.2 ປະເພດນັກທ່ອງທ່ຽວສາກົນ

**ຜູ້ໄປພັກຜ່ອນວັນສຸດສຳປະດາ ແລະ ຜູ້ໄປທ່ອງທ່ຽວໃນຍາມພັກ ທີ່ເປັນຄົນໄທ. ກຸ່ມນີ້ເດີນທາງມາຈາກບາງກອກ ຫຼື ຊຽງ ໃໝ່ໂດຍທາງຍົນ/ລົດ ເພື່ອເຂົ້າມາ ວຽງຈັນ ຫຼືໄປຫຼວງພະບາງ. ພວກເຂົາເຈົ້າຈະຢູ່ບ່ອນດຽວຫຼືບາງຄັ້ງກໍ່ເພີ່ມ ການໄປວັງວຽງຕື່ມ.** ບາງຄົນເດີນທາງໄປ ຄາສິໂນ Vegas ທີ່ສະຫວັນນະເຂດ, ເພື່ອຫຼິ້ນການພະນັນທີ່ຖືກຕ້ອງ ຕາມກົດໝາຍ (ການພະນັນແມ່ນຜິດກົດໝາຍໃນປະເທດໄທ). **ໂດຍສະເລ່ຍແລ້ວເຂົາເຈົ້າພັກຢູ່ 2 ຄືນ. ກຸ່ມຄົນໄທ ແລະນັກເດີນທາງທີ່ປະຢັດງົບປະມານ**, ແມ່ນເຂົ້າມາໂດຍຂະບວນຄາລາວານລົດເມນ້ອຍ(ລົດມິນີບາສ) ຫຼື ໂດຍທາງ ລົດທົວໃຫຍ່. ສ່ວນຫຼາຍແມ່ນຂ້າມຊາຍແດນຢູ່ຂົວມິດຕະພາບ 1 ແລະ ມາຢ້ຽມຢາມນະຄອນຫຼວງວຽງຈັນ, ວັງວຽງ ແລະ ຫຼວງພະບາງ. ພວກເຂົາໃຊ້ເວລາແຕ່ 3 ຫາ 5 ວັນ ແລະ ສິ່ງທີ່ດຶງດູດແລະຈູງໃຈ ຄືການທ່ຽວຊົມ, ການຊື້ສິນຄ້າ, ທຳມະຊາດ ແລະ ສາສະໜາ. ຈຸດສູງສຸດຂອງການເຂົ້າມາທ່ອງທ່ຽວແມ່ນຕອນປີໃໝ່ລາວ/ໄທ ໃນເດືອນເມສາ. **ເຖິງ ວ່າການໃຊ້ຈ່າຍສະເລ່ຍຂ້ອນຂ້າງຕ່ຳກໍ່ຕາມ, ແຕ່ການເຂົ້າມາຂອງໄທແມ່ນແຫຼ່ງລາຍຮັບໃຫຍ່ທີ່ສຸດ.**

**ຂະບວນຄາລາວານລົດຈີນ.** ການເດີນທາງເປັນຄອບຄົວ ຫຼື ການເດີນທາງເປັນຂະບວນຂອງບັນດາສະມາຊິກ ສະໂມສອນລົດ ດ້ວຍຍານພາຫະນະຂອງຕົນເອງໂດຍມີລົດແຕ່ 30 ຫາ 100 ຄັນ. ໂດຍສະເລ່ຍແລ້ວເຂົາເຈົ້າໃຊ້ ເວລາ 4 ຫລື 5 ຄືນ (ຢູ່ເມືອງໄຊ 1 ຄືນ, ຢູ່ຫຼວງພະບາງ 2 ຄືນ, ຢູ່ວັງວຽງ 1 ຄືນ ຫຼື 2 ຄືນ). ເຂົາເຈົ້າມີການທ່ຽວ ຊົມນ້ຳຕົກຕາດ, ສະຖານທີ່ທ່ອງທ່ຽວ ຂອງຫຼວງພະບາງທີ່ອົງການ UNESCO ໄດ້ຮັບຮອງເປັນມໍລະດົກໂລກ ແລະ ການຜະຈົນໄພທີ່ບໍ່ໄດ້ອອກແຮງຫລາຍ (ຂີ່ຊ້າງ ແລະ ການຂີ່ສະລິງ). ເຂົາເຈົ້າພັກເຊົາແລະກິນເຂົ້າຢູ່ໃນໂຮງແຮມ ທີ່ຄົນຈີນເປັນເຈົ້າຂອງ, ຍາມປີໃຫມ່ຈີນແມ່ນຈຸດສູງສຸດທີ່ມີນັກທ່ອງທ່ຽວຈີນເຂົ້າມາ, ທີມງານກອງປະຊຸມປະຈຳ ແຂວງຄາດຄະເນການໃຊ້ຈ່າຍຢູ່ທີ່ 60 ຫາ 100 ໂດລາສະຫະລັດ ຕໍ່ຄົນຕໍ່ມື້, ການເດີນທາງເປັນກຸ່ມໃຫຍ່ຂອງຄົນ ຈີນໂດຍທາງອາກາດ. ການຈັດທົວເປັນແພັກເກັດ (ການທ່ອງທ່ຽວຕາມລາຍການທີ່ບໍລິສັດທົວຈັດໃຫ້ແບບຄົບ ວົງຈອນ), ເຊິ່ງປະກອບມີປີ້ຍົນແລະທີ່ພັກເທົ່ານັ້ນ, ໂດຍທົ່ວໄປແລ້ວ 3 ເຖິງ 4 ຄືນໃນລາວ, ເຄື່ອງບິນລົງຈອດຢູ່ຫຼວງ ພະບາງ ຫຼື ວຽງຈັນ, ຢ້ຽມຢາມວຽງຈັນ, ວັງວຽງ ແລະ ຫຼວງພະບາງເພື່ອທ່ຽວຊົມສະຖານທີ່ຕ່າງໆ ແລະ ຊື້ເຄື່ອງ, ສ່ວນ ຫຼາຍແມ່ນໃນຍາມບຸນກຸດຈີນ. ເຂົາເຈົ້າມັກໃຊ້ບໍລິການ ໂຮງແຮມ ແລະ ຮ້ານອາຫານຂອງຈີນ. ຄາດຄະເນການໃຊ້ ຈ່າຍປະມານ 70 ຫາ 100 ໂດລາຕໍ່ຄົນຕໍ່ວັນ. ການມາທ່ອງທ່ຽວເປັນກຸ່ມໃຫຍ່ໂດຍທາງລົດທົວ, ເຂົາເຈົ້າເດີນທາງ ດ້ວຍລົດເມ 45 ບ່ອນນັ່ງເປັນຂະບວນຄາລາວານ 4 ຫຼື 5 ຄັນລົດ ຈາກມົນທົນຢູນນານແລະໃຊ້ເວລາ 4 ຫລື 5 ຄືນໃນ ພາກເໜືອຂອງປະເທດລາວ, ຫຼວງພະບາງ ແລະ ວັງວຽງ. ແຮງຈູງໃຈຂອງເຂົາເຈົ້າແມ່ນການທ່ຽວຊົມສະຖານທີ່ຕ່າງ ໆ, ຊື້ເຄື່ອງ (ຢາພື້ນເມືອງ, ວັດຖຸບູຮານທີ່ເຮັດດ້ວຍໄມ້), ທຳມະຊາດ ແລະ ການຜະຈົນໄພທີ່ບໍ່ອອກແຮງຫລາຍ ແລະ ມັກໃຊ້ບໍລິການໂຮງແຮມ ແລະ ຮ້ານອາຫານທີ່ຄົນຈີນເປັນເຈົ້າຂອງ. ຈຸດສູງສຸດທີ່ນັກທ່ອງທ່ຽວເຂົ້າມາຫລາຍແມ່ນ ຍາມປີໃໝ່ຈີນ. ຄາດຄະເນການໃຊ້ຈ່າຍ ແມ່ນ 70 ໂດລາຕໍ່ມື້.

**ການທ່ອງທ່ຽວພາກພື້ນຈາກເກົາຫຼີໃຕ້.** ໃນປີ 2019 ມີນັກທ່ອງທ່ຽວເຂົ້າມາ ສປປ ລາວຫຼາຍກວ່າ 200.000 ຄົນ (ເພີ່ມຂຶ້ນ2,7 ເທົ່າເມື່ອທຽບໃສປີ 2012), ການເດີນທາງສ່ວນໃຫຍ່ເປັນກຸ່ມທ່ອງທ່ຽວແບບແພັກເກັດທົວ, ແຕ່ມີຈຳ ນວນຊາວໜຸ່ມເກົາຫຼີທີ່ເດີນທາງມາເປັນສ່ວນບຸກຄົນເພີ່ມຂຶ້ນ, ແບບແບັກແພັກ (ນັກທ່ອງທ່ຽວເປ້ກະເປົາ). ປົກກະຕິ ແລ້ວເຂົາເຈົ້າຈະພັກຢູ່ລາວ 4 ຫາ 6 ຄືນ, ບິນຈາກກຸງໂຊລ ຫຼື ບູຊານ ມາວຽງຈັນ (1 ຄືນ) ຫຼື ຫຼວງພະບາງ (2 ຄືນ). ແຮງຈູງໃຈທີ່ເຮັດໃຫ້ຢາກມາແມ່ນຄວາມຮູ້ສຶກສະບາຍໆດ້ວຍສະເໜ່, ທຳມະຊາດ ແລະ ມໍລະດົກວັດທະນະທຳ. ປົກກະຕິແລ້ວພວກເຂົາໄປຢ້ຽມຢາມໃນຍາມທີ່ເປັນລະດູໜາວຂອງເຂົາເຈົ້າ (ເດືອນພະຈິກ - ມີນາ) ແລະ ໃຊ້ຈ່າຍ 100 ໂດລາຕໍ່ມື້.

**ການທ່ອງທ່ຽວທີ່ມາຈາກແດນໄກ ເຊັ່ນ ຈາກສະຫະລັດ, ເອີຣົບ, ຍີ່ປຸ່ນ, ອັງກິດ, ເຢຍລະມັນ, ອິດສະຕາລີ.** ຕະຫຼາດ ເຫຼົ່ານີ້ຫຼຸດລົງຢ່າງຫຼວງຫຼາຍໃນປີ 2017 ຫຼັງຈາກ ມີການຂະຫຍາຍຕົວຢ່າງຕໍ່ເນື່ອງມາຫຼາຍປີ. ຕະຫລາດເຫລົ່ານີ້ໄດ້ ຟື້ນຕົວໃນປີ 2018/2019 ມາຢູ່ໃນລະດັບຂອງຊຸມປີຕົ້ນ ຂອງ 2010, ກ່ອນທີ່ຈະຍຸບຕົວລົງໃນປີ 2020 ເນື່ອງຈາກ ການລະບາດຂອງ ພະຍາດໂຄວິດ - 19. ໃນບັນດາການທ່ອງທ່ຽວຈາກແດນໄກທັງໝົດ, ສະຫະລັດ (61.184) ເປັນ ຕະຫຼາດທີ່ໃຫຍ່ທີ່ສຸດໃນປີ 2019, ຮອງລົງມາແມ່ນປະເທດຝຣັ່ງ (44.416), ຍີ່ປຸ່ນ (41.736), ອັງກິດ (31.976), ເຢຍລະມັນ (25.346) ແລະ ອິດສະຕຣາລີ (24.750). ນັກທ່ອງທ່ຽວເຫຼົ່ານີ້ລວມມີນັກທ່ອງທ່ຽວແບບແບັກແພັກ, ກຸ່ມ ນັກທ່ອງທ່ຽວເພື່ອຫາປະສົບປະການແຕ່ ຕະຫລາດຂັ້ນກາງ ຫາເທິງ (ບຸກຄົນ / ຄອບຄົວ / ກຸ່ມນ້ອຍ), ກຸ່ມໃຫຍ່ ແລະ ເຮືອລ່ອງນ້ຳແບບຫລູຫລາ.

345. **ການແບ່ງນັກທ່ອງທ່ຽວເຂົ້າປະເທດ ຕາມປະເພດການເດີນທາງໆອາກາດ ແລະ ທາງບົກ.** ນັກທ່ອງທ່ຽວສ່ວນໃຫຍ່ (ສ່ວນຫຼາຍແມ່ນຊາວອາຊີ) ແມ່ນເດີນເຂົ້າມາໂດຍທາງບົກ (89 ສ່ວນຮ້ອຍໃນປີ 2015). ນັກເດີນທາງທີ່ມາຈາກແດນໄກ ສ່ວນໃຫຍ່ແມ່ນຊາວເອີຣົບເຊິ່ງມາທ່ຽວຊົມສະຖານທີ່ຕ່າງໆຕາມລາຍການ ທີ່ບໍລິສັດນຳທ່ຽວເປັນຜູ້ຈັດໃຫ້ ແມ່ນມາເຖິງ ສປປ ລາວ ໂດຍທາງອາກາດ. ນັກເດີນທາງຊາວເອີຣົບທີ່ມາດ້ວຍຕົນເອງຢ່າງອິດສະຫລະ ແລະ ຜູ້ມາຢ້ຽມຊົມຊາວ ເອເຊຍສ່ວນໃຫຍ່ຈາກປະເທດເພື່ອນບ້ານອາດຈະເລືອກເອົາໜຶ່ງໃນ 10 ຊາຍແດນທາງບົກລະຫວ່າງປະເທດ, ເນື່ອງ ຈາກວ່າການເດີນທາງດ້ວຍລົດ, ລົດເມ ແລະ ລົດໄຟໂດຍທົ່ວໄປແມ່ນມີລາຄາຖືກກວ່າຖ້ຽວບິນ.

346. **ຈຸດໝາຍປາຍທາງຫຼັກ ຂອງການທ່ອງທ່ຽວ. ພື້ນຖານໂຄງລ່າງການທ່ອງທ່ຽວທີ່ມີຢູ່ແລ້ວແມ່ນສຸມໃສ່ໃນບັນດາແຂວງຈໍານວນໜ້ອຍໜຶ່ງ.** ນະຄອນຫຼວງວຽງຈັນ ແລະສະຫວັນນະເຂດ (ກາຊີໂນສະຫວັນນະ ເຂດ) ມີນັກທອງທ່ຽວເຂົ້າມາຫຼາຍທີ່ສຸດ (ຕະຫຼາດໄທ). ຊາວເອີຣົບ ແລະ ອາເມຣິກາເໜືອ ລ້ວນແຕ່ໄປທ່ຽວຫຼວງພະບາງ ແລະ ບໍລິເວນອ້ອມຮອບ (ເຊັ່ນ: ນໍ້າຕົກຕາດກວາງຊີ, ຖໍ້າປາກອູ). ສ່ວນຫລາຍກໍໄປວັງວຽງ, ວຽງຈັນແລະບາງຄົນກໍໄປແຂວງຈໍາປາສັກຢູ່ພາກໃຕ້ຂອງລາວເຊັ່ນກັນ. ຄວາມຫຍຸ້ງຍາກໃນການເຂົ້າເຖິງ, ເວລາຂົນສົ່ງທີ່ຍາວນານແລະການຂາດທີ່ພັກທີ່ມີຄຸນນະພາບເປັນການເນັ້ນຍໍ້າເຖິງຄວາມບໍ່ສົມດູນນີ້.

347. **ລັກສະນະລະດູການ.** ມີຄວາມແຕກຕ່າງກັນຢ່າງຫຼວງຫຼາຍໃນແຕ່ລະດູການໃນຕະຫຼາດທີ່ແຕກຕ່າງກັນ, ເຊິ່ງສະທ້ອນໃຫ້ເຫັນເຖິງເຫດຜົນຂອງການເດີນທາງມາລາວ. ສະໜາມບິນວັດໄຕສະແດງໃຫ້ເຫັນວ່າລະດູການທອງທ່ຽວແມ່ນເດືອນຕຸລາຫາເດືອນທັນວາ, ສ່ວນສະໜາມບິນຫຼວງພະບາງແມ່ນເດືອນມັງກອນຫາເດືອນມີນາ. ສໍາລັບນັກທອງທ່ຽວເອີຣົບ, ອາເມຣິກາເຫນືອ ແລະ ເກົາຫຼີ, ລະດູທີ່ນັກທອງທ່ຽວເຫລົ່ານີ້ເຂົ້າມາຫລາຍສຸດແມ່ນເດືອນພະຈິກຫາເດືອນເມສາ. ສໍາລັບນັກທອງທ່ຽວຈາກອາຊຽນແມ່ນຈະບໍ່ຂຶ້ນກັບລະດູການປານໃດ, ແຕ່ລະດູການທອງທ່ຽວຂອງເຂົາເຈົ້າ ແມ່ນເດືອນກຸມພາຫາເດືອນມີຖຸນາ ເຊິ່ງມີຈຸດສູງສຸດໃນຊ່ວງປີໃໝ່ຈີນ/ຫວຽດນາມໃນເດືອນກຸມພາ ແລະ ປີໃໝ່ໄທ/ລາວໃນເດືອນເມສາ.[62]

348. **ຈຸດຫມາຍປາຍທາງທີ່ເພີ່ມໃສ່.** ສໍາລັບກະແສການເຂົ້າມາຂອງນັກທ່ອງທ່ຽວສາກົນເກືອບທັງໝົດ, ເຂົາເຈົ້າ ບໍ່ໄດ້ຖືວ່າ ສປປ ລາວ ເປັນຈຸດໝາຍປາຍທາງທີ່ "ຢູ່ໄດ້ເອງຜູ້ດຽວ". ອັນນີ້ສ່ວນໜຶ່ງເປັນຜົນມາຈາກການບໍ່ມີຖ້ຽວບິນທາງໄກໂດຍກົງມາວຽງຈັນ, ສປປ ລາວ, ແຕ່ຍັງເປັນສາເຫດມາຈາກການຂາດຄວາມຮູ້ຂອງບໍລິສັດນໍາທ່ຽວ ແລະ ນັກທອງທ່ຽວ. ໃນປີ 2019, ນັກທອງທ່ຽວສາກົນ 58 ສ່ວນຮ້ອຍໄດ້ໄປຢ້ຽມຢາມໄທກ່ອນມາປະເທດລາວ ແລະ 35 ສ່ວນຮ້ອຍແມ່ນໄດ້ໄປທ່ຽວຫວຽດນາມ, ກໍາປູເຈຍ ຫຼື ຈີນ. ອັນນີ້ສົ່ງຜົນເຮັດໃຫ້ຈໍານວນວັນຄືນທີ່ພັກແຮມຢູ່ລາວຫຼຸດລົງ ແລະ ດັ່ງນັ້ນການໃຊ້ຈ່າຍສະເລ່ຍຕໍ່ນັກທອງທ່ຽວກໍ່ຈຶ່ງຕໍ່າກວ່າຢູ່ປະເທດເພື່ອນບ້ານ.

## 7.3 ຂອບຂ່າຍດ້ານລະບຽບການ

ພາກນີ້ສະແດງໃຫ້ເຫັນຂອບຂ່າຍດ້ານກົດໝາຍໃນປັດຈຸບັນ, ມີການສະຫຼຸບການປະຕິຮູບໃນຫວ່າງມໍ່ໆມານີ້ ແລະ ບັນດາໂຄງການທີ່ກໍາລັງດໍາເນີນການເຊິ່ງໄດ້ຮັບການສະໜັບສະໜູນຈາກບັນດາຄູ່ຮ່ວມມືສາກົນ.

### 7.3.1 ການພັນລະນາເຖິງຂອບຂ່າຍດ້ານລະບຽບການ

349. **ບໍ່ມີການປ່ຽນແປງອັນໃຫຍ່ຫຼວງໃນ 10 ປີຜ່ານມາ.** ກົດໝາຍວ່າດ້ວຍການທ່ອງທ່ຽວໄດ້ຖືກປະກາດໃຊ້ໃນປີ 2005. ໃນປີ 2011, ລັດຖະບານໄດ້ຍົກລະດັບອົງການທອງທ່ຽວແຫ່ງຊາດລາວ (LNTA) ໃຫ້ເປັນສ່ວນໜຶ່ງຂອງກະຊວງຖະແຫລງຂ່າວ, ວັດທະນະທໍາ ແລະ ທອງທ່ຽວ ແລະ ຂັ້ນແຂວງກໍໄດ້ປັບປຸງການຈັດຕັ້ງຄືນໃໝ່. ໄດ້ກໍານົດໃນວາລະວ່າຈະປັບປຸງໃໝ່ຂອບຂ່າຍດ້ານລະບຽບການການລົງທຶນດ້ານການທອງທ່ຽວ ໃນປີ 2021 ເພື່ອໃຫ້ເປັນມິດກັບນັກລົງທຶນໃຫ້ຫລາຍຂຶ້ນ.

350. **ກະຊວງຖະແຫລງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ ຮັບຜິດຊອບນະໂຍບາຍ ແລະ ລະບຽບການການຄຸ້ມຄອງການທອງທ່ຽວ.** ກະຊວງນີ້ແມ່ນກະຊວງໃຫຍ່ທີ່ມີເຖິງ 45 ກົມ. ການມີກົມຈໍານວນຫລາຍເຮັດໃຫ້ຂະບວນການຕັດສິນໃຈຊ້າລົງ. ເປັນທີ່ເຂົ້າໃຈວ່າກະຊວງກໍາລັງອອກແບບໂຄງສ້າງທີ່ຄ່ອງຕົວກວ່າ. ການທອງທ່ຽວໃນຮູບແບບປັດຈຸບັນປະກອບມີ 3 ກົມທີ່ກວມລວມຂົງເຂດຕ່າງໆ ຄື: (i) ກົມການພັດທະນາການທອງທ່ຽວຮັບຜິດຊອບແຜນການ, ຍຸດທະສາດ ແລະ ການພັດທະນາລະດັບຊາດ ແລະ ຂັ້ນແຂວງ. ກົມຍັງມີການຮ່ວມມືກັບບັນດາປະເທດອາຊຽນ ເຊັ່ນດຽວກັນກັບບັນດາກະຊວງທີ່ກ່ຽວຂ້ອງໃນການສະໜັບສະໜູນຊ່ວຍດ້ານພື້ນຖານໂຄງລ່າງ, ພັດທະນາມາດຕະຖານ, ສະຖິຕິ, (ii) ກົມການຕະຫຼາດການທອງທ່ຽວ ຮັບຜິດຊອບໃນການຈັດຕັ້ງປະຕິບັດແຜນຍຸດທະສາດ. (iii) ກົມຄຸ້ມຄອງການທອງທ່ຽວ ຮັບຜິດຊອບບັນດາລະບຽບການ, ກົດໝາຍ, ດໍາລັດທັງໝົດກ່ຽວກັບການທອງທ່ຽວ, ພ້ອມທັງອອກໃບອະນຸຍາດດໍາເນີນທຸລະກິດການທອງທ່ຽວສໍາລັບການລົງທຶນ ຂອງເອກະຊົນ.

351. **ເຖິງວ່າຈະຍັງຂາດການປະຕິຮູບລະບຽບການ, ການນໍານະໂຍບາຍປະຕູດຽວມາໃຊ້ແມ່ນການພັດ ທະນາທີ່ຕັ້ງໜ້າ.** ນະໂຍບາຍປະຕູດຽວເຮັດໃຫ້ນັກລົງທຶນມາພົວພັນຢູ່ຈຸດດຽວ ໃນຕະຫຼອດຂະບວນການຍື່ນເອກະສານຂໍລົງທຶນ. ສິ່ງດັ່ງກາວໄດ້ຫຼຸດຜ່ອນເວລາທີ່ຈໍາເປັນສໍາລັບການໄດ້ຮັບໃບອະນຸຍາດທອງທ່ຽວຢູ່ຂັ້ນສູນກາງ. ແຕ່ຫນ້າເສຍດາຍ, ການຂາດການປະສານງານລະຫວ່າງສູນກາງ ແລະແຂວງຍັງເຮັດໃຫ້ການອະນຸມັດມີຄວາມຊັກຊ້າ.

352. **ສປປ ລາວ ມີຄວາມມຸ່ງໝັ້ນໃນການຈັດຕັ້ງປະຕິບັດຂໍ້ລິເລີ່ມອາຊຽນເພື່ອເປີດເສລີຂະແໜງການທ່ອງທ່ຽວ.** ທັງປະຊາຄົມເສດຖະກິດອາຊຽນ (AEC) 2025 ແລະ ສັນຍາການຄ້າການບໍລິການອາຊຽນ (ATISA) ທີ່ໄດ້ລົງນາມໃນເດືອນເມສາ 2019 ໄດ້ໃຫ້ຄໍາໝັ້ນສັນຍາວ່າ ສປປ ລາວ ຈະຫລຸດຜ່ອນຂັ້ນຂອດ ແລະ ປັບປຸງລະບຽບການທອງທ່ຽວໃຫ້ກະທັດຮັດງ່າຍດາຍ ເຊິ່ງຈະເປັນການອໍານວຍຄວາມສະດວກໃຫ້ແກ່ການລົງທຶນ ແລະ ການທອງທ່ຽວຈາກພາກພື້ນ. ສັນຍາເຫຼົ່ານີ້ແມ່ນແນໃສ່ປັບປຸງການເຊື່ອມຈອດທາງດ້ານພື້ນຖານໂຄງລ່າງກັບສັນຍາເປີດນ່ານຟ້າຂອງອາຊຽນ ແລະ ປັບ ແລະ ປັບປຸງມາດຕະຖານໃຫ້ດີຂຶ້ນເພື່ອໃຫ້ສອດຄອງ ແລະ ເປັນເອກະພາບກັບມາດຕະຖານອາຊຽນ. ສິ່ງເຫລົ່ານີ້ກໍ່

62. ADB (2020)

ໜ້າຈະເຮັດໃຫ້ຄຸນນະ ພາບການບໍລິການດ້ານການທ່ອງທ່ຽວ ແລະ ສ້າງຄວາມສະດວກໃຫ້ແກ່ການເຄື່ອນຍ້າຍແຮງງານດີຂຶ້ນ. ເຮັດແນວນີ້ກໍ່ຍັງຈະສະໜອງມາດຕະຖານ ທີ່ຈະແຈ້ງສໍາລັບການພັດທະນາການຝຶກອົບຮົມທີ່ເນັ້ນສ້າງໃຫ້ມີຄວາມສາມາດດ້ານອາຊີວະສຶກສາ ແລະຝຶກເຮັດຕົວຈິງໃນວຽກງານຈົນເປັນວຽກ ແລະ ລະບົບການປະເມີນຄວາມສາມາດເຮັດວຽກທີ່ແຕ່ລະຝ່າຍໃຊ້ຄືກັນ.

## ກ່ອງເນື້ອຄວາມ 7.3 ຂະບວນການລົງທຶນ ແລະ ການອອກອະນຸຍາດ

**ການລົງທຶນໃນຂະແໜງທ່ອງທ່ຽວແມ່ນຖືກດັດສົມຄຸ້ມຄອງໂດຍດໍາລັດວ່າດ້ວຍການສົ່ງເສີມການລົງທຶນປີ 2011.**

ຄູ່ມືແນະນໍາການລົງທຶນດ້ານການທ່ອງທ່ຽວໃນ ສປປ ລາວ 2011 ປັດຈຸບັນນີ້ແມ່ນຫລ້າສະໄໝແລ້ວ. ມັນເປັນເລື່ອງທົ່ວໆໄປຫຼາຍ ແລະຂາດຂໍ້ມູນລາຍລະອຽດຫຼາຍຢ່າງ ທີ່ນັກລົງທຶນທີ່ມີເຈດຕະນາລົງທຶນແທ້ຕ້ອງ ການ. ກົມຄຸ້ມຄອງການທ່ອງທ່ຽວ, MOICT ຮັບຜິດຊອບການອອກໃບອະນຸຍາດດໍາເນີນທຸລະກິດ: ນັກລົງທຶນເປັນຜູ້ຍື່ນເອກະສານໂຄງການໃຫ້ກະຊວງການຄ້າ (DERM). ຫຼັງຈາກອະນຸມັດ, ໂຄງການໄດ້ຖືກສົ່ງຕໍ່ໄປຍັງກົມຄຸ້ມຄອງການທ່ອງທ່ຽວ, MOICT ເຊິ່ງເປັນຜູ້ອອກໃບອະນຸຍາດດໍາເນີນທຸລະກິດ.

*ປະເພດຂອງການລົງທຶນ:* (i) ການລົງທຶນພາຍໃນ ຫຼື ຕ່າງປະເທດເປັນເຈົ້າຂອງຮ້ອຍສ່ວນຮ້ອຍ; (ii) ການຮ່ວມທຶນລະຫວ່າງນັກລົງທຶນພາຍໃນ ແລະ ຕ່າງປະເທດ (ນັກລົງທຶນຕ່າງປະເທດຕ້ອງປະກອບສ່ວນຢ່າງໜ້ອຍ 10 ສ່ວນຮ້ອຍຂອງທຶນທັງໝົດ); ແລະ (iii) ການລົງທຶນຮ່ວມທຸລະກິດຕາມສັນຍາ (ການຮ່ວມລົງທຶນລະຫວ່າງຫົວໜ່ວຍພາຍໃນ ແລະ ຕ່າງປະເທດ ໂດຍບໍ່ມີການສ້າງຕັ້ງນິຕິບຸກຄົນ ຫຼື ສາຂາໃໝ່).

ທຸລະກິດການທ່ອງທ່ຽວທີ່ເປີດໃຫ້ແກ່ການລົງທຶນ: ການທ່ອງທ່ຽວລະຫວ່າງປະເທດ; ສະຖານທີ່ທ່ອງທ່ຽວ; ການບໍລິການມາດຕະຖານສໍາລັບການຂົນສົ່ງນັກທ່ອງທ່ຽວ; ທີ່ພັກ (ໂຮງແຮມ, ຣີສອດ 3-5 ດາວ); ຮ້ານອາຫານ; ສູນຝຶກອົບຮົມການບໍລິການການນໍາທ່ຽວ; ທີ່ປຶກສາດ້ານການທ່ອງທ່ຽວ; ສະຖານບັນເທີງທີ່ຕັ້ງຢູ່ໃນໂຮງແຮມ ແລະ ຣີສອດ 3-5 ດາວ; ເຄື່ອງທີ່ລະນຶກ; ສວນສະໜຸກສໍາລັບການທ່ອງທ່ຽວ.

ນັກລົງທຶນຕ່າງປະເທດໄດ້ຮັບອະນຸຍາດ ໃຫ້ເປັນເຈົ້າຂອງຮ້ານອາຫານຮ້ອຍສ່ວນຮ້ອຍ, ໂຮງແຮມ ແລະ ຣີສອດ 3 ຫາ 5 ດາວ ແລະ ບໍລິສັດທ່ອງທ່ຽວສາກົນ.

ທຸລະກິດທ່ອງທ່ຽວທີ່ສະຫງວນໄວ້ໃຫ້ສໍາລັບວິສາຫະກິດ ຂອງລາວ: ເຮືອນພັກ; ຜູ້ນໍາທ່ຽວ; ທຸລະກິດການນໍາທ່ຽວພາຍໃນປະເທດ; ແລະທຸລະກິດການນໍາທ່ຽວໃນເຂດພິເສດຕ່າງໆ ເຊັ່ນ: ການຍ່າງປ່າ, ເຮືອຄາຢັກ, ການປີນໜ້າຜາ

### 7.3.2 ສິ່ງກີດກັ້ນການຂະຫຍາຍຕົວ ຂອງການລົງທຶນ ແລະ ການທ່ອງທ່ຽວ

353. **ຄວາມກັງວົນຕໍ່ຄຸນນະພາບ ແລະ ຄວາມມີພ້ອມຂອງຂໍ້ມູນການທ່ອງທ່ຽວ.** ໄດ້ມີການຈໍາແນກໃຫ້ເຫັນບັນຫາດັ່ງກ່າວດົນນານແລ້ວ ແລະ ຍັງບໍ່ທັນໄດ້ຮັບການແກ້ໄຂ. ຂໍ້ມູນຂາດຄວາມຖືກຕ້ອງ ແລະ ເຊື່ອຖືໄດ້ຢ່າງພຽງພໍ, ເຊິ່ງເຮັດໃຫ້ຍາກທີ່ຈະປະເມີນນໍ້າໜັກທີ່ແທ້ຈິງ ຂອງການທ່ອງທ່ຽວໃນເສດຖະກິດ. ຂໍ້ມູນລະອຽດກວ່ານີ້ອາດຈະຊ່ວຍໃຫ້ມີການວິເຄາະທີ່ດີກວ່າກ່ຽວກັບແຮງຈູງໃຈ ຂອງແຕ່ລະຕະຫຼາດເປົ້າໝາຍ ແລະ ຊ່ວຍໃຫ້ສາມາດຈັດຕັ້ງປະຕິບັດນະໂຍບາຍການຕະຫຼາດໃຫ້ມີປະສິດທິພາບຫຼາຍຂຶ້ນ. ສະຖິຕິທີ່ດີກວ່າຍອມຈະຊ່ວຍປັບປຸງການຄຸ້ມຄອງແບບຍືນຍົງ ຂອງຈຸດໝາຍປາຍທາງ ໂດຍການໃຫ້ພາກສ່ວນກ່ຽວຂ້ອງຂອງການທ່ອງທ່ຽວມີວິທີການທີ່ງ່າຍ ແລະເປັນປະໂຫຍດຕໍ່ການວັດແທກ ແລະການຕິດຕາມ ແລະ ເຮັດໃຫ້ຜູ້ທີ່ກ່ຽວຂ້ອງກັບການທ່ອງທ່ຽວສາມາດແບ່ງປັນ ແລະປຽບທຽບຄວາມກ້າວໜ້າ ແລະ ຜົນການປະຕິບັດງານຂອງພວກເຂົາໃນອະນາຄົດ.

354. **ສະພາບແວດລ້ອມທາງທຸລະກິດທີ່ທ້າທາຍ.** ດັ່ງທີ່ໄດ້ລະບຸໄວ້ກ່ອນໜ້ານີ້ໃນບົດລາຍງານ, ເປັນທີ່ຮັບຮູ້ວ່າສະພາບແວດລ້ອມທາງທຸລະກິດແມ່ນສະຫລັບຊັບຊ້ອນ ແລະ ບໍ່ໂປ່ງໃສ. ຂະແໜງການທ່ອງທ່ຽວຂອງ ສປປ ລາວ ແມ່ນມີລັກສະນະທີ່ຈະຕ້ອງໄດ້ມີໃບອະນຸຍາດດໍາເນີນງານຫລາຍໆຢ່າງເຊິ່ງມີຄວາມຫຍຸ້ງຍາກກ່ອນຈະໄດ້ຮັບ. ທັງໆທີ່ຂະແໜງການທ່ອງທ່ຽວຍັງຄົງເປັນບູລິມະສິດຂອງລັດຖະບານ, ຜູ້ເຄື່ອນໄຫວໃນດ້ານຕ່າງໆແມ່ນຍັງບໍ່ໄດ້ຮັບການສະໜັບສະໜູນຢ່າງພຽງພໍ. ການທ່ອງທ່ຽວຍັງສືບຕໍ່ຜະເຊີນກັບການແຂ່ງຂັນຈາກຂະແໜງການທີ່ມີລາຍໄດ້ຫຼາຍກວ່າ ເຊັ່ນ: ພະລັງງານໄຟຟ້າ ຫຼື ບໍ່ແຮ່ ເຊິ່ງຜົນຕອບແທນຂອງການລົງທຶນແມ່ນເຫັນໄດ້ຊັດເຈນ ແລະ ງ່າຍກວ່າໃນການຄິດໄລ່. ວິສາຫະກິດທ່ອງທ່ຽວທ້ອງຖິ່ນ ໃນ ສປປ ລາວ ຍັງເວົ້າເຖິງ ການຂາດການເຂົ້າເຖິງສິນເຊື່ອ ທີ່ມີດອກເບ້ຍຍອມເຍົາ. ຜູ້ໃຫ້ສໍາພາດຫຼາຍຄົນໃຫ້ຂໍ້ສັງເກດວ່າ, ກົດໝາຍແລະລະບຽບການບໍ່ໄດ້ຖືກປະຕິບັດຢ່າງສອດຄ່ອງກັນ ແລະໃຫ້ຄໍາເຫັນວ່າຂອບຂາຍລະບຽບການໄດ້ສ້າງຊ່ອງວ່າງທີ່ເຮັດໃຫ້ນັກລົງທຶນບາງຄົນສາມາດທໍາລາຍເຈດຕະນາລົມຂອງນິຕິກໍາ.

355. **ສປປ ລາວ ກໍາລັງຈັດຕັ້ງປະຕິບັດມາດຕະຖານແຫ່ງຊາດ ແລະ ການຈັດລະດັບຂັ້ນຄຸນນະພາບແບບສະໝັກໃຈ ແລະ ມາດຕະຖານອາຊຽນ, ແນວໃດກໍ່ຕາມ, ສິ່ງເຫຼົ່ານີ້ບໍ່ໄດ້ຖືກນໍາໃຊ້ຢ່າງກວ້າງຂວາງ.** ລະບົບການຈັດລະດັບທີ່ພັກແມ່ນຄຸ້ມຄອງຕາມຂໍ້ຕົກລົງ ເລກທີ 060/ອທຂ, ລົງວັນທີ: 26 ກຸມພາ 2007. ກົມຄຸ້ມຄອງການທ່ອງທ່ຽວຈາກ MOICT ເປັນຜູ້ຮັບຜິດຊອບໃນການອະນຸມັດການຈັດລະດັບໂຮງແຮມ ແລະ ຣີສອດ 4-5 ດາວ ໃນຂະນະດຽວ ພະແນກຖະແຫລງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວແຂວງ ແມ່ນຄຸ້ມຄອງເຮືອນພັກ 1 ຫາ 3 ດາວ. ການຢັ້ງຢືນແມ່ນໃຊ້ໄດ້ສໍາລັບ 3 ຫາ 5 ປີ, ຢ່າງໃດກໍ່ຕາມ, ເນື່ອງຈາກວ່າມັນເປັນຄວາມສະໝັກໃຈ, ມັນຈຶ່ງບໍ່ໄດ້ຖືກໃຊ້ຢ່າງກວ້າງຂວາງໂດຍໂຮງແຮມ

ຂະໜາດນ້ອຍແລະເຮືອນພັກຈຳນວນຫຼາຍ. ບາງຄັ້ງທີ່ພັກອາໄສກໍ່ແມ່ນສື່ສານອອກໄປວ່າກິດຈະການຂອງຕົນເອງໄດ້ມາດຖານນັ້ນນີ້ທຽບເທົ່າກັບມາດຕະຖານສາກົນທີ່ເຂົາເຈົ້າເປັນຜູ້ຈັດທຽບເອົາເອງ. ມາດຕະຖານ ແລະ ລະບົບການຈັດຊັ້ນຄຸນນະພາບ ຂອງລາວສຳລັບຮ້ານອາຫານກໍ່ມີຄືກັນ (ມາດຕະຖານສຸຂະອະນາໄມ) ແລະສະຖານທີ່ທ່ອງທ່ຽວ (ສຸຂະອະນາໄມ ແລະຄວາມປອດໄພ) ແຕ່ນັກລົງທຶນບໍ່ໄດ້ໃຊ້ໃນນາງການຕະຫຼາດ.

356. **ທັງມາດຕະຖານ ສປປ ລາວ ແລະ ອາຊຽນ ແມ່ນນຳໃຊ້ໄດ້ ແລະ ມາດຕະຖານອາຊຽນກໍ່ຍັງຄົງຖືກຈັດຕັ້ງປະຕິບັດຢູ່.** ມາດຕະຖານເພີ່ມເຕີມປະກອບມີໂຮງແຮມສີຂຽວ, ບໍລິການສະປາ, ມາດຕະຖານ ຂອງເຮືອນທີ່ຮັບແຂກມາຢູ່ນຳໃຫ້ສາມາດພັກແຮມໃນເຮືອນທີ່ຕົນເອງຢູ່ (Homestay), ການທ່ອງທ່ຽວຊຸມຊົນ, ເມືອງທ່ອງທ່ຽວສະອາດ, ຫ້ອງນ້ຳສາທາລະນະ, ສະຖານທີ່ MICE. ປັດຈຸບັນ, ສປປ ລາວ ພວມຈັດຕັ້ງປະຕິບັດມາດຕະຖານການທ່ອງທ່ຽວແຫ່ງຊາດ ແລະ ຂອງອາຊຽນ. ຂະບວນການກວດສອບ ແລະ ປະເມີນຜົນ ໄດ້ມີການຕົກລົງກັນລະຫວ່າງບັນດາປະເທດສະມາຊິກອາຊຽນໃຫ້ແຕ່ລະປະເທດສະມາຊິກອາຊຽນ ແຕ່ງຕັ້ງຄະນະປະເມີນມາດຕະຖານການທ່ອງທ່ຽວອາຊຽນ.

357. **ການຈັດຕັ້ງປະຕິບັດສັນຍາເປີດນ່ານຟ້າຂອງອາຊຽນຍັງຊັກຊ້າ.** ການໃຫ້ສັດຕະຍາບັນສັນຍາການເປີດນ່ານຟ້າອາຊຽນໂດຍບັນດາປະເທດສະມາຊິກອາຊຽນ ໄດ້ສຳເລັດໃນປີ 2016. ສັນຍາສະບັບນີ້ຮຽກຮ້ອງໃຫ້ບັນດາປະເທດສະມາຊິກອາຊຽນເປີດສະໜາມບິນສາກົນຢ່າງເຕັມສ່ວນ ແລະ ໃຫ້ສິດເສລີພາບໃນການສັນຈອນທາງອາກາດ ຂັ້ນທີ 3, 4 (3 ແລະ 4 ໝາຍເຖິງສິດທິໃນການບິນຈາກປະເທດຂອງຜູ້ຂົນສົ່ງໄປຍັງຕ່າງປະເທດ ແລະ ບິນກັບໂດຍບໍ່ຂໍອະນຸຍາດລັດຖະບານ), 5 (ຄືສິດທິການບິນລະຫວ່າງສອງປະເທດທີ່ເປັນຕ່າງປະເທດໃນໄລຍະເສັ້ນທາງການບິນໂດຍເລີ່ມບິນຈາກຫລືກັບມາສຸດຢູ່ປະເທດຕົນ) ໃຫ້ບັນດາເຄື່ອງບິນຂົນສົ່ງທີ່ເປີດດຳເນີນກິດຈະການຢູ່ປະເທດສະມາຊິກອື່ນໆ ໂດຍບໍ່ຈຳກັດຄວາມຖີ່ຂອງຖ້ຽວບິນຫຼືຈຳກັດຄວາມສາມາດບັນທຸກ. ເຖິງຢ່າງໃດກໍຕາມ, ການອອກກົດໝາຍ ແລະ ນະໂຍບາຍຂອງປະເທດຍັງຈຳກັດການຈັດຕັ້ງປະຕິບັດ[63]. ສປປ ລາວ ໄດ້ລົງນາມໃນສັນຍາສອງຝ່າຍກັບບັນດາຄູ່ຮ່ວມອາຊຽນ ແທນທີ່ຈະນຳໃຊ້ບັນດາສັນຍາທີ່ໄດ້ລົງນາມໃນຂອບຂອງອາຊຽນ.

358. **ການຂາດແຄນພະນັກງານວິຊາຊີບ ແລະ ຊຳນານງານດ້ານການທ່ອງທ່ຽວຢ່າງຕໍ່ເນື່ອງ.** ໃນໄລຍະ 2 ທົດສະວັດຜ່ານມາ ໄດ້ສຸມທຶນຮອນຈຳນວນຫຼວງຫລາຍເຂົ້າໃສ່ການພັດທະນາທັກສະ ແລະ ຂີດຄວາມສາມາດໃນຂະແໜງການບໍລິການການເດີນທາງ ແລະ ການທ່ອງທ່ຽວ. ເຖິງວ່າໄດ້ມີຄວາມໝາຍໝັ້ນດັ່ງ ກ່າວ, ການສະໜອງແຮງງານທີ່ມີທັກສະ ແລະ ວິຊາຊີບດ້ານການທ່ອງທ່ຽວແມ່ນຍັງບໍ່ກົງກັບຄວາມຕ້ອງ ການທີ່ເພີ່ມຂຶ້ນທາງດ້ານຄວາມຈຳເປັນທີ່ຕ້ອງມີຊັບພະຍາກອນມະນຸດທີ່ມີຄວາມຊຳນິຊຳນານສູງຂຶ້ນ, ໂດຍສະເພາະໃນຈຸດໝາຍປາຍທາງທີ່ໄດ້ສ້າງຂຶ້ນແລ້ວ, ໃນຂະນະທີ່ຢູ່ຈຸດໝາຍປາຍທາງທີ່ກຳລັງມີຄວາມພົ້ນເດັ່ນຂຶ້ນນັ້ນ, ພັດຍັງປະສົບກັບສິ່ງທ້າທາຍໃນການຂາດການເຂົ້າເຖິງການຝຶກອົບຮົມທັກສະທີ່ມີຄຸນນະ ພາບ. ໂຮງແຮມມາດຕະຖານສາກົນແລະໂດຍສະເພາະຕົວແທນສຳນັກງານທ່ອງທ່ຽວແມ່ນຜະເຊີນກັບການຂາດແຄນຜູ້ສະໝັກງານທີ່ເປັນຄົນທ້ອງຖິ່ນທີ່ມີຄຸນວຸດທິ. ພວກເຂົາເຈົ້າມັກທີ່ຈະຝຶກອົບຮົມພະນັກງານເອົາເອງຕາມວິທີການຂອງຕົນ, ໂດຍພິຈາລະນາປະຫວັດໂດຍຫຍໍ້ (ແລະທ່າແຮງ) ຂອງຜູ້ສະໝັກແທນທີ່ຈະແມ່ນດ້ານຄວາມສາມາດທີ່ມີຢູ່ຂອງເຂົາເຈົ້າໃນຕອນທີ່ຮັບສະໝັກ. ເຂົາເຈົ້າມີການຝຶກອົບຮົມດູແລພະນັກ ງານໃໝ່ທີ່ເຂັ້ມແຂງສຳລັບວິສາຫະກິດ ເຊິ່ງໃຫ້ພະນັກງານທຸກຄົນຕ້ອງໄດ້ຜ່ານ ເມື່ອເວລາເຂົ້າຮ່ວມອົງ ການ ແລະມີພະແນກພັດທະນາຄົນເພື່ອຊ່ວຍສະມາຊິກໃນທີມງານໃຫ້ມີການປັບປຸງຕົນເອງຢ່າງຕໍ່ເນື່ອງ.

## ກ່ອງເນື້ອຄວາມ 7.4 ຜູ້ນຳທ່ຽວ (ໄກດ໌ນຳທ່ຽວ)

ສປປ ລາວ ຄຸ້ມຄອງຜູ້ນຳພາທ່ຽວ. ຈະເຮັດວຽກເປັນຜູ້ນຳທ່ຽວໄດ້ຕ້ອງໄດ້ມີໃບອະນຸຍາດຢ່າງເປັນທາງການທີ່ອອກໂດຍ MOICT ແລະ ຈະເຫັນມີການກວດກາເລື້ອຍໆຂອງເຈົ້າໜ້າທີ່ຕາມສະຖານທີ່ທ່ອງທ່ຽວ. ວຽກນີ້ ແມ່ນອາຊີບສະຫງວນໄວ້ໃຫ້ແກ່ພົນລະເມືອງລາວ. ຜູ້ນຳທ່ຽວອາດຈະແມ່ນພະນັກງານຂອງສຳນັກງານທ່ອງທ່ຽວ ຫຼື ເປັນຜູ້ເຮັດວຽກອິດສະຫລະ. ພາຍໃຕ້ສັນຍາຂອງອາຊຽນວ່າດ້ວຍການເຄື່ອນຍ້າຍແຮງງານຢ່າງເສລີນັ້ນ, ໂດຍທົ່ວໄປແລ້ວຜູ້ນຳທ່ຽວທີ່ມີຄຸນວຸດທິໃນອາຊຽນແມ່ນຈະໄດ້ຮັບອະນຸຍາດໃຫ້ເຮັດວຽກຢູ່ລາວ.

ຜູ້ນຳທ່ຽວທີ່ມີໃບອະນຸຍາດຕ້ອງຕອບສະໜອງໄດ້ດັ່ງນີ້: (i) ເປັນພົນລະເມືອງລາວ, ອາຍຸຢ່າງໜ້ອຍ 18 ປີ, ມີພູມລຳເນົາ ຢູ່ ສປປ ລາວ; (ii) ບໍ່ມີປະຫວັດຖືກຄະດີອາຍາ; (iii) ມີໃບປະກາດສະນິຍະບັດ ຫຼື ໃບຢັ້ງຢືນການເຂົ້າຮ່ວມການຝຶກອົບຮົມນຳທ່ຽວພາຍໃນ ຫຼື ຕ່າງປະເທດ, ຈາກຫຼັກສູດທີ່ໄດ້ຮັບການອະນຸມັດຢ່າງເປັນທາງການ; (iv) ມີຄວາມຮູ້ ແລະ ຄວາມສາມາດທາງດ້ານວິຊາສະເພາະ ເຊັ່ນ: ພູມສາດ, ປະຫວັດສາດ, ພາສາຕ່າງປະເທດ ແລະ ການປະຖົມພະຍາບານເບື້ອງຕົ້ນ; ແລະ (v) ຄວາມຊື່ສັດ, ການປະພຶດດີ ແລະ ຄວາມສຸຂະພາບ.

ສປປ ລາວ ຄຸ້ມຄອງຜູ້ນຳພາທ່ຽວ. ຈະເຮັດວຽກເປັນຜູ້ນຳທ່ຽວໄດ້ຕ້ອງໄດ້ມີໃບອະນຸຍາດຢ່າງເປັນທາງການທີ່ອອກໂດຍ MOICT ແລະ ຈະເຫັນມີການກວດກາເລື້ອຍໆຂອງເຈົ້າໜ້າທີ່ຕາມສະຖານທີ່ທ່ອງທ່ຽວ. ວຽກນີ້ ແມ່ນອາຊີບສະຫງວນໄວ້ໃຫ້ແກ່ພົນລະເມືອງລາວ. ຜູ້ນຳທ່ຽວອາດຈະແມ່ນພະນັກງານຂອງສຳນັກງານທ່ອງທ່ຽວ ຫຼື ເປັນຜູ້ເຮັດ

63. ໜ່ວຍງານປຶກສາຫາລືດ້ານການທ່ອງທ່ຽວຂອງ GMS, ຍຸດທະສາດຂະແໜງການທ່ອງທ່ຽວອະນຸພາກພື້ນແມ່ນ້ຳຂອງ 2016 - 2025.

ວຽກອິດສະຫລະ. ພາຍໃຕ້ສັນຍາຂອງອາຊຽນວ່າດ້ວຍການເຄື່ອນຍ້າຍແຮງງານຢ່າງເສລີນັ້ນ, ໂດຍທົ່ວໄປແລ້ວຜູ້ນໍາທ່ຽວທີ່ມີຄຸນວຸດທິໃນອາຊຽນແມ່ນຈະໄດ້ຮັບອະນຸຍາດໃຫ້ເຮັດວຽກຢູ່ລາວ.

ຜູ້ນໍາທ່ຽວທີ່ມີໃບອະນຸຍາດຕ້ອງຕອບສະໜອງໄດ້ດັ່ງນີ້: (i) ເປັນພົນລະເມືອງລາວ, ອາຍຸຢ່າງໜ້ອຍ 18 ປີ, ມີພູມລໍາເນົາ ຢູ່ ສປປ ລາວ; (ii) ບໍ່ມີປະຫວັດຖືກຄະດີອາຍາ; (iii) ມີໃບປະກາດສະນີຍະບັດ ຫຼື ໃບຢັ້ງຢືນການເຂົ້າຮ່ວມການຝຶກອົບຮົມນໍາທ່ຽວພາຍໃນ ຫຼື ຕ່າງປະເທດ, ຈາກຫຼັກສູດທີ່ໄດ້ຮັບການອະນຸມັດຢ່າງເປັນທາງການ; (iv) ມີຄວາມຮູ້ ແລະ ຄວາມສາມາດທາງດ້ານວິຊາສະເພາະ ເຊັ່ນ: ພູມສາດ, ປະຫວັດສາດ, ພາສາຕ່າງປະເທດ ແລະ ການປະຖົມພະຍາບານເບື້ອງຕົ້ນ; ແລະ (v) ຄວາມຊື່ສັດ, ການປະພຶດດີ ແລະ ຄວາມສຸພາບ.

ສະຖາບັນສື່ມວນຊົນ, ວັດທະນະທໍາ ແລະ ທ່ອງທ່ຽວ ມີການຈັດການຝຶກອົບຮົມປີລະ 1 ຄັ້ງ ຢ່າງເປັນທາງການເປັນເວລາ 2,5 ເດືອນ ທີ່ນະຄອນຫຼວງວຽງຈັນ. ໃນປີ 2019, ມີຜູ້ນໍາທ່ຽວໃໝ່ 66 ຄົນໄດ້ຮັບການຝຶກອົບຮົມ. ການຝຶກອົບຮົມແມ່ນທາງດ້ານວິຊາການ ແລະ ຍັງບໍ່ເນັ້ນພາກປະຕິບັດເທົ່າທີ່ຄວນ. ໃນການສໍາພາດ, ບັນດາບໍລິສັດນໍາທ່ຽວໄດ້ ກ່າວວ່າການຝຶກອົບຮົມແມ່ນບໍ່ທັນກັບສະພາບປັດຈຸບັນປານໃດ, ຜູ້ນໍາທ່ຽວບໍ່ໄດ້ຖືກຝຶກອົບຮົມເພື່ອປັບຕົວເຂົ້າກັບລັກສະນະຈຸດພິເສດຂອງນັກທ່ອງທ່ຽວແຕ່ລະກຸ່ມທີ່ແຕກຕ່າງກັນ ແລະບໍ່ຮູ້ເທົ່າທັນການຢ່າງພຽງພໍກ່ຽວກັບພາກປະຕິບັດຂອງການທ່ອງທ່ຽວແບບຍືນຍົງ. ຕົວແທນສໍາ ນັກງານທ່ອງທ່ຽວແບບວິຊາຊີບຫຼາຍແຫ່ງ ມີການຈັດຝຶກອົບຮົມເພີ່ມເຕີມໃນຍາມທີ່ບໍ່ແມ່ນລະດູການທ່ອງທ່ຽວ.

ສປປ ລາວ ຂາດແຄນຜູ້ນໍາທ່ຽວທີ່ມີຄຸນນະພາບ. ລະດັບຄວາມຮູ້ທົ່ວໄປ ແລະ ລະດັບພາສາຂອງເຂົາເຈົ້າແມ່ນຍັງອ່ອນຫຼາຍກັບປະເທດເພື່ອນບ້ານ. ໃນລະດູການທ່ອງທ່ຽວ ແມ່ນມີຄວາມຫຍຸ້ງຍາກທີ່ຈະຊອກຫາຜູ້ນໍາທ່ຽວທີ່ປາກພາສາອັງກິດໄດ້ດີ ແລະ ຂາດແຄນຜູ້ນໍາທ່ຽວທີ່ເວົ້າພາສາຝຣັ່ງ, ແອສປາໂຍນ ແລະ ເຢຍລະມັນ. ຜູ້ນໍາທ່ຽວທີ່ດີແມ່ນໄດ້ຈອງໄວ້ກ່ອນຫຼາຍເດືອນລ່ວງໜ້າ.

ເນື່ອງຈາກຜູ້ນໍາທ່ຽວມີຈໍານວນໜ້ອຍ (ມີຜູ້ນໍາທ່ຽວ ພຽງ 956 ຄົນທີ່ໄດ້ລົງທະບຽນໃນປີ 2018), ຜູ້ນໍາທ່ຽວອິດສະຫລະທີ່ມີຄຸນນະພາບຕາມປົກກະຕິແມ່ນມີລາຍໄດ້ດີ (ຈາກ $ 40 ຫາ $ 80 ຕໍ່ມື້ໂດຍອີງຕາມພາສາ) ເຖິງແມ່ນວ່າການເຮັດວຽກແມ່ນອີງຕາມລະດູການ (ເດືອນພະຈິກຫາເດືອນມີນາ).

## ກ່ອງເນື້ອຄວາມ 7.5 ບົດບາດຍິງ-ຊາຍ ກັບຂະແໜງການທ່ອງທ່ຽວ

**ແຮງງານຍິງກວມເອົາປະມານ 63 ສ່ວນຮ້ອຍຂອງແຮງງານທັງໝົດໃນຂະແໜງບໍລິການການເດີນທາງ ແລະ ການທ່ອງທ່ຽວ.** ແມ່ຍິງກວມເອົາ 57 ສ່ວນຮ້ອຍຂອງແຮງງານໃນການບໍລິການທີ່ພັກ ແລະຮ້ານອາຫານທີ່ໄດ້ຮັບຄ່າຈ້າງຕໍ່າກວ່າ. ໃນການບໍລິ ການການທ່ອງທ່ຽວທີ່ໄດ້ຮັບຄ່າຈ້າງສູງກວ່າ, ສະຖານທີ່ທ່ອງທ່ຽວ ແລະ ການບັນເທີງ, ແມ່ຍິງ ແລະ ຜູ້ຊາຍແມ່ນຊົນເຜົ່າສ່ວນນ້ອຍທີ່ມີສ່ວນແບ່ງ 26, 42 ແລະ 45 ສ່ວນຮ້ອຍຕາມລໍາດັບ.

**ວຽກທີ່ແມ່ຍິງເຮັດສ່ວນຫຼາຍເປັນວຽກທີ່ບໍ່ຕ້ອງການທັກສະປານໃດ (ແມ່ບ້ານ, ພະນັກງານຮັບໃຊ້).** ນັກສຶກສາຍິງທີ່ຈົບອອກຈາກສາຂາວິຊາການບໍລິການການເດີນທາງ ແລະ ການທ່ອງທ່ຽວທີ່ເຂົ້າເຮັດວຽກ ມີຊັດສ່ວນທີ່ສູງກວ່າກໍາລັງແຮງງານທັງໝົດຂອງການບໍລິການການເດີນທາງ ແລະ ການທ່ອງທ່ຽວ. ໃນປີ 2017, 82 ສ່ວນຮ້ອຍຂອງນັກສຶກສາທີ່ຈົບການສຶກສາເປັນເພດຍິງ, ໃນນັ້ນ ຫລາຍກວ່າຈໍານວນ 1.000 ກວ່າຄົນທີ່ຮຽນຈົບຫຼັກສູດການປຸງອາຫານ ແລະ ການບໍລິການ ມີແມ່ຍິງຫຼາຍກວ່າ 94 ສ່ວນຮ້ອຍ. ນອກຈາກນັ້ນ, ຫຼາຍກວ່າ 2/3 ຂອງນັກສຶກສາທີ່ຮຽນຈົບການໂຮງແຮມ ແລະ ການທ່ອງທ່ຽວ ແມ່ນແມ່ຍິງ (Lux Dev LAO029 ການສໍາຫຼວດການຈ້າງງານ ແລະ ທັກສະ ຂອງວິສາຫະກິດການບໍລິການການເດີນທາງ ແລະ ການທ່ອງທ່ຽວ ໃນ ສປປ ລາວ, 2018).

359. **ເມື່ອເດີນທາງມາຮອດ ແມ່ນສາມາດຂໍວີຊາເຂົ້າປະເທດ ທີ່ມີລາຄາຖືກ.** ຂໍ້ກໍານົດດ້ານວີຊາ ເຂົ້າ ສປປ ລາວ ບໍ່ຖືວ່າເປັນຂໍ້ຈໍາກັດສໍາລັບຜູ້ປະກອບການທ່ອງທ່ຽວ. ສປປ ລາວ ຈັດຢູ່ໃນອັນດັບທີ 23 ໃນ 141 ປະເທດສໍາລັບການເປີດກວ້າງດ້ານວີຊາໃນປີ 2015. ສະມາຊິກອາຊຽນ[64] ບໍ່ຈໍາເປັນຕ້ອງຂໍວີຊາ, ຖ້າວ່າຈະພັກຢູ່ໃນປະເທດບໍ່ເກີນ 30 ວັນ. ສໍາລັບຄົນສັນຊາດຕ່າງໆສ່ວນໃຫຍ່ (180), ແມ່ນສາມາດຂໍວີຊາໄດ້ງ່າຍຢູ່ດ່ານຊາຍແດນຫຼັກ (ວີຊາກັບດ່ານ), ຫຼືທາງອອນລາຍສໍາລັບພົນລະເມືອງຂອງ 150 ປະເທດທີ່ມີສິດທິຈະໄດ້ຮັບ ໂດຍນໍາໃຊ້ໃບຄໍາຮ້ອງອີວີຊາຂອງລາວ e-Visa. ຄ່າໃຊ້ຈ່າຍໃນການຂໍວີຊາແມ່ນສາ ມາດຈ່າຍໄດ້ສໍາລັບກຸ່ມເປົ້າໝາຍທີ່ແຕກຕ່າງກັນ.

360. **ການທີ່ສາກົນຈະເຂົ້າ-ອອກ ສປປ ລາວ ສໍາລັບການເດີນທາງ ຂອງພາກພື້ນ ບໍ່ຖືວ່າເປັນບັນຫາຂໍ້ຈໍາກັດ.** ສປປ ລາວ ມີສະໜາມບິນສາກົນ 4 ແຫ່ງ (ໃຫຍ່ກວ່າໝູ່ແມ່ນສະໜາມບິນວັດໄຕ ນະຄອນຫຼວງວຽງຈັນ, ຮອງລົງມາແມ່ນສະໜາມບິນຫຼວງພະບາງ ຈາກນັ້ນ ປາກເຊ ແລະ ສະຫວັນນະເຂດ) ແລະ ດ່ານສາກົນເຂົ້າປະເທດໂດຍທາງບົກ 19 ແຫ່ງ. ການເຊື່ອມຈອດດ້ານເສັ້ນທາງກັບປະເທດເພື່ອນບ້ານກໍາລັງມີການປັບປຸງແລະການເຊື່ອມຕໍ່ທາງລົດໄຟກັບຈີນກໍ່ໄດ້ເປີດໃນເດືອນທັນວາ 2021.

64. ເຊັ່ນດຽວກັນກັບພົນລະເມືອງຂອງປະເທດຍີ່ປຸ່ນ, ເກົາຫລີໃຕ້, ລັດເຊຍ ແລະ ສະວິດເຊີແລນ.

361. **ສປປ ລາວ ບໍ່ມີເສັ້ນທາງການບິນໄລຍະໄກໂດຍກົງ, ນັກເດີນທາງມີການໄປຜ່ານສູນກາງການຂົນສົ່ງພາກພື້ນເພື່ອຕໍ່ເຄື່ອງບິນ.** ມີຖ້ຽວບິນກົງໄປວຽງຈັນ ຈາກຮ່າໂນ້ຍ, ນະຄອນໂຮ່ຈິມິນ, ບາງກອກ, ສິງກະໂປ ແລະ ກົວລາລຳເປີ. ຖ້ຽວບິນທາງໄກໂດຍກົງຈາກຍີ່ປຸ່ນ, ເກົາຫຼີ, ອົດສະຕຣາລີ, ເອີຣົບ ແລະ ສະຫະລັດອາເມຣິກາແມ່ນບໍ່ມີ. ອັນນີ້ເຮັດໃຫ້ເປັນທີ່ດຶງດູດສໍາລັບກຸ່ມທົວ ແລະ ນັກທ່ອງທ່ຽວທີ່ມາດ້ວຍຕົນເອງເພື່ອລວມ ສປປ ລາວ ເຂົ້າກັບບັນດາຈຸດໝາຍປາຍທາງການທ່ອງທ່ຽວອື່ນໆໃນພາກພື້ນ (ເຊັ່ນ: ໄທ, ຫວຽດນາມ, ສິງກະໂປ ແລະ ມາເລເຊຍ). ຄ່າໃຊ້ຈ່າຍຂອງຖ້ຽວບິນຈາກປະເທດເພື່ອນບ້ານມາຍັງ ສປປ ລາວ ແມ່ນຂ້ອນຂ້າງແພງກວ່າເມື່ອທຽບໃສ່ກັບລາຄາຖ້ຽວບິນໄລຍະສັ້ນທີ່ຄ້າຍຄືງກັນໃນພາກພື້ນ, ອັນເປັນຜົນມາຈາກຄ່າທໍານຽມການລົງຈອດເດີ່ນ ແລະ APPS (ລະບົບປະມວນຜົນຜູ້ໂດຍສານແບບກ້າວໜ້າ) ທີ່ຂ້ອນຂ້າງສູງກວ່າ.

### 7.3.4 ການທົບທວນແຜນງານໂຄງການຕົ້ນຕໍທີ່ຜ່ານມາ ແລະ ກໍາລັງດໍາເນີນຢູ່ໃນດ້ານການທ່ອງທ່ຽວ

362. **ມີພຽງແຕ່ 3,1 ສ່ວນຮ້ອຍ ຂອງພະນັກງານໃນຂະແໜງທ່ອງທ່ຽວ ແລະ ການໂຮງແຮມເທົ່ານັ້ນທີ່ມີຄຸນວຸດທິທີ່ກ່ຽວຂ້ອງກັບການທ່ອງທ່ຽວ.** ການພັດທະນາຊັບພະຍາກອນມະນຸດແມ່ນມີຄວາມຈໍາເປັນເພື່ອໃຫ້ການພັດທະນາການທ່ອງທ່ຽວປະສົບຜົນສໍາເລັດ. ເກືອບເຄິ່ງໜຶ່ງຂອງແຮງງານໃນຂະແໜງການແມ່ນບໍ່ຮູ້ໜັງສື.[65] ໃນຊຸມປີມໍ່ໆມານີ້, ຄູ່ຮ່ວມມືສາກົນໄດ້ໃຫ້ຄວາມສໍາຄັນກັບການຝຶກອົບຮົມແຮງງານທີ່ມີຄວາມຊໍານິຊໍານານໃນການທ່ອງທ່ຽວ ແລະ ການບໍລິການຕ້ອນຮັບຜ່ານການຝຶກອົບຮົມວິຊາຊີບ (LuxDev, Swisscontact). ADB ສືບຕໍ່ສະໜັບສະໜູນການປັບປຸງພື້ນຖານໂຄງລ່າງທາງດ້ານວັດຖຸເຕັກນິກ, ສ້າງຂີດຄວາມສາມາດໃຫ້ແກ່ເຈົ້າໜ້າທີ່ຂອງລັດໃນການວາງແຜນ ແລະ ການຄຸ້ມຄອງຈຸດໝາຍປາຍທາງ. GIZ ຊ່ວຍເຫຼືອ ສປປ ລາວ ໃນການເຊື່ອມໂຍງເສດຖະກິດພາກພື້ນ ເຂົ້າໃນອາຊຽນ. ນອກນັ້ນ, ກໍ່ຍັງມີໂຄງການສົ່ງເສີມ ແລະ ເສີມສ້າງຄວາມຍືນຍົງຂອງການທ່ອງທ່ຽວໃນ ສປປ ລາວ (GIZ, NZAID, PLAN International) ແລະ ສະໜັບສະໜູນການອະນຸລັກທໍາມະຊາດ ແລະ ການທ່ອງທ່ຽວແບບນິເວດ (NZAID, WCS).

## ກ່ອງເນື້ອຄວາມ 7.6 ຜົນກະທົບ ຂອງບັນດາໂຄງການດ້ານການທ່ອງທ່ຽວ

ບັນດາຄູ່ຮ່ວມມືສາກົນໄດ້ໃຫ້ການຊ່ວຍເຫຼືອດ້ານວິຊາການ ແລະ ດ້ານການເງິນໃຫ້ແກ່ຂະແໜງການທ່ອງທ່ຽວ; ຢ່າງໃດກໍ່ຕາມ, ການປະເມີນຜົນກະທົບໃນໄລຍະຍາວຂອງໂຄງການແມ່ນມີຄວາມທ້າທາຍຫຼາຍ. ໃນດ້ານຊັບພະຍາກອນມະນຸດ, ທັກສະຂອງພະນັກງານກໍ່ໄດ້ຮັບການປັບປຸງ ແຕ່ຈໍານວນພະນັກງານທີ່ມີຄຸນວຸດທິຍັງບໍ່ພຽງພໍ. ບັນດາໂຄງການແມ່ນເນັ້ນໃສ່ໂມດູນການຝຶກອົບຮົມດ້ານວິຊາການ (ມາດຕະຖານສຸຂະອະນາໄມ ແລະອື່ນໆ) ທີ່ເຫມາະສົມສໍາລັບວຽກໃນທີມປະຕິບັດງານ (ເຊັ່ນ: ເຮືອນຄົວ, ວຽກບ້ານການເຮືອນ) ທີ່ມີລະດັບທັກສະທີ່ຂ້ອນຂ້າງຕໍ່າ.

ຜູ້ສໍາພາດຫຼາຍຄົນໄດ້ສະແດງຄວາມເປັນຫ່ວງວ່າ ການແກ້ໄຂບັນຫາໂດຍໂຄງການບໍ່ຍືນຍົງ ເມື່ອໝົດການໃຫ້ທຶນຈາກພາຍນອກ.

ບົດລາຍງານການປະເມີນຂອງສະຖາບັນການທ່ອງທ່ຽວແລະການໂຮງແຮມແຫ່ງຊາດລາວ (LANITH): ຫຼັງຈາກໄດ້ສັງເກດເຫັນຜົນໃນທາງບວກໃນລະຫວ່າງມີການຈັດຕັ້ງປະຕິບັດໂຄງການ, ບົດລາຍງານໄດ້ເນັ້ນໃສ່ຄວາມຍືນຍົງ ແລະ ໄດ້ໃຫ້ຂໍ້ສັງເກດວ່າ[65]: "ຕອນມີການປະເມີນຜົນຂັ້ນສຸດທ້າຍ, ໄດ້ມີການລະບຸເຖິງຊ່ອງວ່າງ ແລະ ຈຸດອ່ອນ ເຊິ່ງອາດສາມາດກີດຂວາງຫຼືແມ້ກະທັ້ງກໍ່ເປັນການບ່ອນທໍາລາຍຜົນກະທົບທາງບວກໃນໄລຍະຍາວ ຂອງ LAO/020. ມີການຂາດຄວາມເປັນຜູ້ນໍາ, ການຄຸ້ມຄອງບໍລິຫານ ແລະ ຄວາມສາມາດດ້ານການຕະຫຼາດ ທີ່ສະຖາບັນການທ່ອງທ່ຽວ ແລະ ການໂຮງແຮມແຫ່ງຊາດລາວ (...) (LANITH) ຍັງຂາດການກໍານົດບົດບາດ ແລະ ຄວາມຮັບຜິດຊອບທີ່ຈະແຈ້ງສໍາລັບພະນັກງານທີ່ເປັນຜູ້ສອນ ແລະ ຜູ້ອໍານວຍການ. ນອກຈາກນັ້ນ, ຍັງບໍ່ໄດ້ແຕ່ງຕັ້ງຄະນະກໍາມະການ ຫຼື ໂຄງສ້າງການຄຸ້ມຄອງທຽບເທົ່າທີ່ເໝາະສົມ ເຊິ່ງອາດຈະສາມາດໄປຄູ່ກັບການພັດທະນາໂຮງຮຽນ ແລະ ສູນຝຶກອົບຮົມ LANITH ໃນຂັ້ນຕໍ່ໄປ ພາຍຫຼັງໂຄງການ LAO/020 ສິ້ນສຸດລົງ. ຈຸດອ່ອນເຫຼົ່ານີ້ສາມາດທໍາລາຍຄວາມຍືນຍົງຂອງສະຖາບັນໃນໄລຍະກາງຂອງ LANITH ແລະ ດັ່ງນັ້ນ ຈຶ່ງຕ້ອງການການແກ້ໄຂໃນໄລຍະສັ້ນ. ຢ່າງໃດກໍ່ຕາມ, ຄວາມກັງວົນໃຫຍ່ທີ່ສຸດແມ່ນກ່ຽວຂ້ອງກັບຄວາມຍືນຍົງທາງດ້ານການເງິນຂອງ LANITH (...) ບໍ່ມີຫຼັກຖານທີ່ຊັດເຈນວ່າຄວາມຍືນຍົງທາງດ້ານການເງິນຂອງສະຖາບັນການທ່ອງທ່ຽວແລະການໂຮງແຮມແຫ່ງຊາດລາວຈະສາມາດບັນລຸໄດ້ໃນໄລຍະຍາວແນວໃດ."

65. Lux Dev, ການສໍາຫລວດການຈ້າງງານ ແລະ ທັກສະ ຂອງບັນດາວິສາຫະກິດການທ່ອງທ່ຽວ ແລະ ການໂຮງແຮມ ໃນ ສປປ ລາວ, ກໍລະກົດ 2018.
65. ການປະເມີນຜົນຄັ້ງສຸດທ້າຍ ລາວ/020.

**ຕາຕະລາງທີ 7.1 ບັນດາໂຄງການດ້ານການທ່ອງທ່ຽວ**

| ໂຄງການ/ຜູ້ໃຫ້ທຶນ/ອົງການພັດທະນາ | ຄູ່ຮ່ວມຈັດຕັ້ງປະຕິບັດ | ໄລຍະເວລາດຳເນີນໂຄງການແລະງົບປະມານ | ວັດຖຸປະສົງ | ຜົນໄດ້ຮັບ |
|---|---|---|---|---|
| LuxDev LAO020 'ສ້າງຄວາມເຂັ້ມແຂງໃຫ້ຊັບພະຍາກອນມະນຸດໃນດ້ານການບໍລິການຕ້ອນ ຮັບ ແລະ ການທ່ອງທ່ຽວ' | ກະຊວງສຶກສາທິການ ແລະ ກິລາ ກັບສະມາຄົມໂຮງແຮມ ແລະ ຮ້ານອາຫານລາວ (LHRA) ແລະ ສະມາຄົມທຸລະກິດທ່ອງທ່ຽວລາວ (LATA) | 2008-2016 8.617.000 ເອີໂຣ(EUR) | ການພັດທະນາຊັບພະຍາ ກອນມະນຸດໃນດ້ານການ ທ່ອງທ່ຽວ | ການສ້າງຜະລິດຕະພັນດ້ານການສຶກສາແລະການຝຶກອົບຮົມຂອງສະຖາບັນການທ່ອງທ່ຽວ ແລະ ກຸ່ມໂຮງແຮມແຫ່ງຊາດລາວ ໄດ້ 5 ຢ່າງ ແລະ ໄດ້ມີຫລາຍກວ່າ 3.000 ຄົນໄດ້ຮັບການຝຶກອົບຮົມ:<br>- ໃບປະກາສະນີຍະບັດຂອງ LANITH<br>- ໃບຢັ້ງຢືນ ຂອງ LANITH<br>- ໜັງສືເດີນທາງໄປສູ່ຄວາມສຳເລັດ<br>- ຊຸດຝຶກອົບຮົມຜູ້ບໍລິຫານ<br>- ເພື່ອນທານແຫ່ງອາຊີບ (ການສ້າງພື້ນຖານອາຊີບ) |
| LuxDev/SDC (ອົງການເພື່ອການພັດທະນາ ແລະ ການຮ່ວມມືຂອງສະວິດ): ໂຄງການ LAO 029 'ທັກສະສຳລັບການທ່ອງທ່ຽວ' | ກະຊວງສຶກສາທິການ ແລະ ກິລາ | 2016-2021 15.000.000 ເອີໂຣ (EUR) | ການສົ່ງເສີມການເຕີບໂຕແບບຍືນຍົງ ແລະ ທົ່ວເຖິງຂອງຂະແໜງການ ການທ່ອງທ່ຽວ ແລະ ການບໍລິການການເດີນທາງ | - ໃນປີ 2019: ໄດ້ມີຜູ້ເຂົ້າຮ່ວມ 5.119 ຄົນທີ່ໄດ້ຈົບ ຫລືລົງທະບຽນຮຽນໃນໂຄງການອາຊີວະສຶກສາ ແລະ ການພັດ ທະນາທັກສະ. ໄດ້ມີພະນັກງານ 1.897 ຄົນຈາກ 750 MSMEs ທີ່ໄດ້ຈົບການຝຶກອົບຮົມຍົກສູງທັກສະ.<br>- ຢູ່ວັງວຽງກໍ່ໄດ້ເປີດສະຖານການຝຶກອົບຮົມດ້ານວຽກງານໂຮງແຮມ ແລະ ຮ້ານອາຫານຂຶ້ນໃນເດືອນພະຈິກ 2020 |
| Swisscontact/ SDC: ໂຄງການສົ່ງເສີມທຸລະກິດທ່ອງທ່ຽວຈຳປາສັກ | ພະແນກຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແຂວງຈຳປາສັກ (DICT) ແລະ ສະມາຄົມໂຮງແຮມ ແລະ ຮ້ານອາຫານ ແຂວງຈຳປາສັກ | 2013-2016 2.200.000 ໂດລາ ສະຫະລັດ (USD) | ລິເລີ່ມວິທີການຄຸ້ມຄອງຈຸດໝາຍປາຍທາງການທ່ອງທ່ຽວສຳລັບແຂວງຈຳປາສັກ, ສົ່ງ ເສີມການສ້າງຂີດຄວາມສາ ມາດສຳລັບອົງການຂອງທ້ອງ ຖິ່ນດ້ານການພັດທະນາຕະ ຫລາດ ແລະ ຕ່ອງໂສ້ມູນຄ່າ | ແຜນການຄຸ້ມຄອງຈຸດໝາຍປາຍທາງການທ່ອງທ່ຽວຂອງແຂວງຈຳປາສັກ 2016-18, ການເປີດຕົວເວບໄຊທ໌ ພາກໃຕ້ລາວ www.southern-laos.com ແລະ ການມອບໂອນໃຫ້ທີມງານການຕະຫລາດພາກໃຕ້ລາວ |

| | | | | |
|---|---|---|---|---|
| Swisscontact ແລະ ແຜນງານນະວັດຕະກຳ ແລະ ການເຕີບໂຕແບບທົ່ວເຖິງຂອງແມ່ນ້ຳຂອງໆອີງການ SDC (MIGIP) | | 2017-2020 | ພັດທະນາຂະແໜງການທ່ອງທ່ຽວ, ສ້າງຄວາມເຂັ້ມແຂງດ້ານອົງກອນ, ໂຄງສ້າງ ແລະ ຂະບວນການໃນການຄຸ້ມຄອງຈຸດໝາຍປາຍທາງຂອງການທ່ອງທ່ຽວ | ໄດ້ບັນລຸຜົນຮັບພາຍໃນປີ 2019<br>ບັນດາວິສາຫະກິດ SMEs ດ້ານການທ່ອງທ່ຽວ 95 ແຫ່ງໄດ້ເພີ່ມລາຍໄດ້ຂອງຕົນຂຶ້ນ<br>- 195 SMEs ດ້ານການທ່ອງທ່ຽວໄດ້ນຳສະເໜີຜະລິດຕະພັນໃໝ່ໃຫ້ແກ່ກຸ່ມນັກທ່ອງທ່ຽວເປົ້າໝາຍ ຫລື ໄດ້ປັບປຸງລາຍການໆບໍລິການທີ່ມີຢູ່<br>- 346 SMEs ດ້ານການທ່ອງທ່ຽວໄດ້ເຮັດວຽກນຳຍຸດທະສາດການຄຸ້ມຄອງຈຸດໝາຍປາຍທາງການທ່ອງທ່ຽວ ແລະ ໄດ້ນຳເອົາເຄື່ອງມື ແລະ ຊອງທາງທີ່ໄດ້ພັດທະນາມາໄປໃຊ້ໃນກິດຈະກຳການຕະຫລາດຂອງຕົນ<br>- 260 SMEs ດ້ານການທ່ອງທ່ຽວໄດ້ຮັບການຝຶກອົບຮົມເພື່ອປັບປຸງຄຸນນະພາບຂອງການບໍລິການ |
| Swisscontact ໂດຍໄດ້ຮັບທຶນຈາກປະເທດລຸກຊໍາບວກ, SDC ແລະ GOL; ໂຄງການຝຶກອົບຮົມເພື່ອນທ່ານແຫ່ງອາຊີບ (PTHAS) ຢູ່ ຈຳປາສັກ ແລະ 8 ແຂວງພາກກາງ ແລະ ພາກໃຕ | LANITH ແລະ ສະມາຄົມໂຮງແຮມ ແລະ ຮ້ານອາຫານຂອງແຂວງ | 2017-2021 | 120 ຫົວໜ່ວຍການຝຶກອົບຮົມ, ເພື່ອແກ້ໄຂບັນຫາຄຸນນະ ພາບການບໍລິການ ຕ່ຳໃນທຸ ລະກິດການທ່ອງທ່ຽວ ແລະ ການບໍລິການການເດີນທາງ | ຜົນ ທີ່ຄາດຫວັງຈະໄດ້ຮັບ:<br>- ຍົກສູງທັກສະໃຫ້ພະນັກງານ 500 ຄົນໃນບັນດາ MS-MEs ທີ່ມີຢູ່ໃນດ້ານການທ່ອງທ່ຽວ ແລະ ການບໍລິການການເດີນທາງ<br>- ຝຶກອົບຮົມໃຫ້ 500 ຄົນທີ່ມີພູມຫລັງທີ່ດ້ອຍໂອກາດ ແລະສະໜັບສະໜູນໃຫ້ເຂົາເຈົ້າໄດ້ເຂົ້າເຮັດວຽກໃນຂະແໜງການທ່ອງທ່ຽວ ແລະ ການບໍລິການການເດີນທາງ<br>- ສະໜັບສະໜູນໃຫ້ນັກຝຶກອົບຮົມທີ່ເປັນຄົນລາວ 36 ຄົນເພື່ອໃຫ້ໄດ້ບັນລຸມາດຕະຖານຂອງອາຊຽນໃນການເປັນນັກຝຶກອົບຮົມ ແລະ ຜູ້ປະເມີນ<br>ຮູ ກໍາລັງດຳເນີນໄປ |

| | | | | |
|---|---|---|---|---|
| 'ໂຄງການສ້າງພື້ນຖານໂຄງລ່າງດ້ານການທ່ອງທ່ຽວຂອງ GMS ເພື່ອການເຕີບໂຕແບບທົ່ວເຖິງ' ຂອງ ADB (TIIGP) ຮ່ວມກັບ MICT ຢູ່ແຂວງຈຳປາສັກ, ວຽງຈັນ, ຫລວງພະບາງ ແລະ ອຸດົມໄຊ | MOICT, ພະແນກຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ (DICT) ຈຳປາສັກ, ຄຳມ່ວນ, ຫລວງພະບາງ ແລະ ອຸດົມໄຊ | 2015-2020 43,57 ລ້ານໂດລາສະຫະລັດ (USD) | ປັບປຸງພື້ນຖານໂຄງລ່າງເພື່ອເຂົ້າເຖິງສະຖານທີ່ທ່ອງທ່ຽວປາຍທາງ, ປັບປຸງການບໍລິການດ້ານສິ່ງແວດລ້ອມຢູ່ສູນການທ່ອງທ່ຽວລະຫວ່າງຊາຍແດນ, ເສີມສ້າງຂີດຄວາມສາມາດຂອງອົງກອນເພື່ອສົ່ງເສີມການເຕີບໂຕການທ່ອງທ່ຽວແບບທົ່ວເຖິງ, ການຈັດຕັ້ງປະຕິບັດ, ແລະການຄຸ້ມຄອງອົງຄວາມຮູ້ | (ບົດລາຍງານຄວາມຄືບໜ້າ ເລກທີ 21 ມັງກອນ-ມີນາ 21): ຄວາມຄືບໜ້າທາງກາຍະພາບຮອດປັດຈຸບັນ: 91,38 ສ່ວນຮ້ອຍ<br>- ການປັບປຸງພື້ນຖານໂຄງລ່າງເພື່ອເຂົ້າເຖິງສະຖານທີ່ທ່ອງທ່ຽວປາຍທາງ ແລະ ການປັບປຸງການບໍລິການດ້ານສິ່ງແວດລ້ອມຢູ່ສູນການທ່ອງທ່ຽວລະຫວ່າງຊາຍແດນແມ່ນດຳເນີນໄປຕາມແຜນ.<br>- ແຜນການຄຸ້ມຄອງຈຸດໝາຍປາຍທາງການທ່ອງທ່ຽວໄດ້ຮັບການອະນຸມັດ ແລະ ຕາໜ່າງການຄຸ້ມຄອງຈຸດໝາຍປາຍທາງການທ່ອງທ່ຽວໄດ້ຮັບການປັບປຸງ. ມີສະມາຊິກໄດ້ເຂົ້າຝຶກອົບຮົມທັງໝົດ 261 ຄົນ(43 ສ່ວນຮ້ອຍ)<br>- ການຈັດຕັ້ງປະຕິບັດໂຄງການມີປະສິດທິຜົນ ແລະ ການຄຸ້ມຄອງອົງຄວາມ |
| ໂຄງການ ' ໃສ່ໃຈ ຫລວງພະບາງ' ຂອງ GIZ ພາຍໃຕ້ໂຄງການ'RELATED' (ການເຊື່ອມໂຍງເສດຖະກິດພາກພື້ນຂອງລາວເຂົ້າອາຊຽນ, ການພັດທະນາການຄ້າ ແລະ ຄວາມເປັນຜູ້ປະກອບການ). ສ້າງຕັ້ງໂດຍສະຫະພາບເອີຣົບ. | ສະມາຄົມໂຮງແຮມ ແລະ ຮ້ານອາຫານແຂວງຫລວງພະບາງ (LHRA) ສະມາຄົມທຸລະກິດທ່ອງທ່ຽວແຂວງຫລວງພະບາງ (LUTA) | 2016-2019 1.800.000 ເອີໂຣEUR (ການປະກອບສ່ວນຂອງອີຢູ: 90 ສ່ວນຮ້ອຍ) | ການພັດທະນາຈຸດໝາຍປາຍທາງການທ່ອງທ່ຽວໃຫ້ຍືນຍົງ. | - ປະສິດທິພາບການນຳໃຊ້ພະລັງງານ, ການຄຸ້ມຄອງການນຳໃຊ້ນ້ຳ ແລະ ສິ່ງເສດເຫລືອໃນບັນດາໂຮງແຮມ, ເຮືອນພັກ ແລະ ຮ້ານອາຫານ 70 ແຫ່ງ ໄດ້ຮັບການປັບປຸງ<br>- ຜະລິດຕະພັນທັດຖະກຳໃໝ່ຫຼາຍກວ່າ 30 ຊະນິດ ໄດ້ຖືກຜະລິດອອກພາຍໃນທ້ອງຖິ່ນ ແລະ ອອກວາງຕະຫຼາດໂດຍໃຊ້ການພາຍເຮັດດ້ວຍມື ຂອງຊາວຫລວງພະບາງ<br>- ບັນດາມາດຕະຖານອາຊຽນດ້ານການທ່ອງທ່ຽວເຮັດໃຫ້ຄຸນນະພາບພື້ນຖານໂຄງລ່າງມີການປັບປຸງດີຂຶ້ນ.<br>- ການປັບປຸງຂໍ້ກຳນົດ ກົດລະບຽບ ດ້ານວັດທະນະທຳ ເພື່ອເຮັດໃຫ້ເກີດການທ່ອງທ່ຽວທີ່ມີຄວາມຮັບຜິດຊອບ<br>- ມີການເປີດບັ້ນປຸກລະດົມນັກທ່ອງທ່ຽວ 'ຈົ່ງເປັນນັກເດີນທາງທີ່ມີສະຕິໃສ່ໃຈ' |
| ໂຄງການ SUSTOUR ລາວ ໃນ ແຜນສາກົນເຢຍລະມັນ PLAN International Germany ທີ່ສະຫະພາບເອີຣົບສ້າງຕັ້ງ (ນະຄອນຫລວງວຽງຈັນ, ແຂວງວຽງຈັນ ແລະ ຫລວງພະບາງ) | ແຜນສາກົນເຢຍລະມັນ (Plan International Germany) ກັບ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ (LNCCI) + ECEAT (ສູນການທ່ອງທ່ຽວດ້ານກະສິກຳ ແລະ ແບບນິເວດ ຂອງເອີຣົບ). | 2020-2024 2.223.857 ເອີໂຣEUR (ການປະກອບສ່ວນຂອງອີຢູ: 90 ສ່ວນຮ້ອຍ) | ການສົ່ງເສີມການທ່ອງທ່ຽວແບບຍືນຍົງໂດຍເຮັດໃຫ້ MSMEs ເຊື່ອມໂຍງເຂົ້າໃນຕ່ອງໂສ້ການສະໜອງ ແລະ ການຍົກສູງຄວາມຕື່ນຕົວຂອງຜູ້ຊົມໃຊ້ | ກຳລັງດຳເນີນຢູ່ |

## 7.4 ການປ່ຽນແປງໃນອຸດສາຫະກຳການທ່ອງທ່ຽວໂລກ ແລະ ຜົນກະທົບຕໍ່ຂະແໜງການທ່ອງທ່ຽວຂອງ ສປປ ລາວ

363. **ການລະບາດຂອງພະຍາດໂຄວິດ-19 ພວມເຮັດໃຫ້ເກີດວິກິດການອັນເລິກເຊິ່ງ ໃນອຸດສາຫະກຳການທ່ອງທ່ຽວທົ່ວໂລກ.** ໃນລາວ, ການປິດຊາຍແດນທັງໝົດໃນວັນທີ 15 ມີນາ 2020, ໄດ້ເຮັດໃຫ້ການເຄື່ອນໄຫວການທ່ອງທ່ຽວທັງໝົດຢຸດຕິລົງຢ່າງກະທັນຫັນ ຍົກເວັ້ນການທ່ອງທ່ຽວພາຍໃນປະເທດ. ເຖິງວ່າປັດຈຸບັນ ໄດ້ມີການເປີດຊາຍແດນຄືນໃໝ່ແລ້ວກໍ່ຕາມ, ແຕ່ການເດີນທາງລະຫວ່າງປະເທດຍັງຄົງຕົກຕໍ່າຢ່າງໜັກໜ່ວງ. ຄາດວ່າການແຜ່ລະບາດຂອງພະຍາດໂຄວິດ-19 ຈະຫາຍສາບສູນໄປ ແລະ ກາຍເປັນພະຍາດລະດູການໃນອີກ 12 ເດືອນຂ້າງໜ້າ. ສິ່ງທ້າທາຍທີ່ໄດ້ລະບຸໄວ້ໃນບົດນີ້ແມ່ນມີຢູ່ກ່ອນພະຍາດລະບາດ. ການແກ້ໄຂຂໍ້ຈຳກັດເຫຼົ່ານີ້ຈະສ້າງຄວາມສະດວກ ໃຫ້ຂະແໜງການທ່ອງທ່ຽວຟື້ນຟູຫຼັງພະຍາດລະບາດ.

### 7.4.1 ການເພີ່ມຄວາມຕ້ອງການ ຂອງການທ່ອງທ່ຽວແບບຍືນຍົງ

364. **ການນັບມື້ເພີ່ມຂຶ້ນຂອງການທ່ອງທ່ຽວທີ່ສະເໝີພາບ ແລະ ຍືນຍົງ. ນັບແຕ່ທ້າຍຊຸມປີ 1990 ເປັນຕົ້ນມາ ໄດ້ມີຄວາມຮູ້ສຶກສຳນຶກກ່ຽວກັບບັນຫາດ້ານສິ່ງແວດລ້ອມ ແລະ ການປ່ຽນແປງຂອງດິນຟ້າອາກາດ ໂດຍມີນັກທ່ອງທ່ຽວຈຳນວນຫຼາຍຮຽກຮ້ອງໃຫ້ມີການພັກຜ່ອນທີ່ມີຈັນຍາບັນກວ່າ.** ອັນນີ້ໄດ້ເພີ່ມຄວາມຕ້ອງ ການດ້ານການທ່ອງທ່ຽວທີ່ຍືນຍົງ ແລະ ດ້ານຈຸດຫມາຍປາຍທາງ 'ທີ່ເປັນຂອງແທ້' ເຊິ່ງເຮັດໃຫ້ໄດ້ປະສົບການທີ່ເປັນເອກະລັກ, ອັນຈະເປັນປະໂຫຍດຕໍ່ຊຸມຊົນທ້ອງຖິ່ນ ແລະ ມີການປ່ອຍອາຍແກ໊ສເຮືອນແກ້ວຕໍ່າ(ໃຊ້ພະລັງງານໜ້ອຍລົງ). ຍັງມີຄວາມຕ້ອງການທີ່ເພີ່ມຂຶ້ນດ້ານວັນພັກ ທີ່ເນັ້ນເປົ້າໝາຍໃສ່ການທ່ອງທ່ຽວ 'ແບບບໍ່ຟ້າວຟັ່ງ' ເພື່ອໃຫ້ມີເວລາໃນການສຳຫລວດຊອກຮູ້ພື້ນທີ່ໆໄປ ນັບທັງຊຸມຊົນ, ໃສ່ສຸຂະພາບ ແລະ ຄວາມຢູ່ດີກິນດີ ແລະ ສະຖານທີ່ທ່ອງທ່ຽວທີ່ມີທິວທັດທຳມະຊາດທີ່ສວຍງາມ. ການສຸມໃສ່ການຫຼຸດຜ່ອນຄວາມເຄັ່ງຕຶງ ແລະ "ການທ່ອງທ່ຽວແບບບໍ່ຟ້າວຟັ່ງ" ແມ່ນການພັດທະນາໃນທາງບວກສຳລັບ ສປປ ລາວ ເນື່ອງຈາກມັນເປັນຄວາມຕ້ອງການທີ່ກຳລັງເພີ່ມຂຶ້ນຈາກນັກທ່ອງທ່ຽວທີ່ສາມາດເປັນໄປໄດ້ ໃນປະເທດທີ່ມີລາຍໄດ້ສູງ.

### 7.4.2 ບັນດາຕະຫລາດໃໝ່ໃນພາກພື້ນທີ່ກຳລັງເພີ່ມຂຶ້ນ

365. **ການທ່ອງທ່ຽວໃນພາກພື້ນລວມທັງຈີນຈະສືບຕໍ່ຂະຫຍາຍຕົວ.** ການເພີ່ມລະດັບຊີວິດການເປັນຢູ່ແລະການເຕີບໃຫຍ່ຂອງຊົນຊັ້ນກາງທີ່ມີຈຳນວຍຫລາຍຂຶ້ນໃນໄທ, ຈີນ ຫຼືຫວຽດນາມ ໄດ້ເປັນເງື່ອນໄຂໃຫ້ກຸ່ມປະຊາກອນໃໝ່ຈຳນວນໜຶ່ງສາມາດເດີນທາງ. ການຈັດໃຫ້ມີຖ້ຽວບິນຕົງ ກໍ່ເປັນການອຳນວຍຄວາມສະດວກໃຫ້ແກ່ນັກທ່ອງທ່ຽວຂາເຂົ້າຈາກມາເລເຊຍແລະສິງກະໂປ ເຊັ່ນກັນ. ປະເທດລາວໃຫ້ຄວາມງຽບສະ ຫງົບ ແລະ ຄວາມເປັນຂອງແທ້ທີ່ຢູ່ບໍ່ໄກຈາກມະຫານະຄອນທີ່ສຳຄັນຂອງອາຊີ. ມັນເປັນສິ່ງສຳຄັນທີ່ຈະເຂົ້າໃຈວ່ານັກທ່ອງທ່ຽວໃຫມ່ເຫຼົ່ານີ້ກຳລັງຊອກຫາຫຍັງໃນເວລາທີ່ພວກເຂົາເດີນທາງໄປລາວເພື່ອຈະຮູ້ວິທີສື່ສານທີ່ເປັນອັນສະເພາະເຈາະຈົງເພື່ອດຶງດູດພວກເຂົາເຈົ້າ. Ctrip, ຜູ້ໃຫ້ບໍລິການທາງອອນລາຍໃນດ້ານການເດີນທາງຂອງຈີນ, ໄດ້ລາຍງານສອງທ່າອ່ຽງໃຫຍ່ໃນຕະຫຼາດການທ່ອງທ່ຽວຂອງຈີນ: ການຂະ ຫຍາຍຕົວຂອງການທ່ອງທ່ຽວອິດສະຫລະ ແລະ ການຂະຫຍາຍຕົວໄວ ຂອງບັນດາຕົວເມືອງນ້ອຍທີ່ມີລະດັບການພັດທະນາຕໍ່າກຳລັງກາຍເປັນຕະຫຼາດທີ່ມາ ຂອງການທ່ອງທ່ຽວ. Ctrip ໄດ້ຄາດຄະເນວ່າ ຫຼາຍກວ່າ 70% ຂອງນັກທ່ອງທ່ຽວຈີນທີ່ເດີນທາງໄປປະເທດຕ່າງໆ ແມ່ນໄດ້ໄປທ່ຽວບັນດາປະເທດອື່ນໆໃນອາຊີ ໃນປີ 2017 ແລະ ອີງຕາມ Ctrip, ເກືອບເຄິ່ງໜຶ່ງຂອງນັກທ່ອງທ່ຽວທີ່ມີເປົ້າໝາຍເດີນທາງໄປບັນດາປະເທດໃນອາຊີ ແມ່ນຈະໄປບັນດາປະເທດໃນອາຊີຕາເວັນອອກສຽງໃຕ້.[66] ປັດຈຸບັນ, ເຂົາເຈົ້າໄປທ່ຽວໄທເປັນຕົ້ນຕໍ; ເຖິງຢ່າງໃດກໍຕາມ, ເມື່ອມີເສັ້ນທາງລົດໄຟ ສາຍໃໝ່ ຈະມີການຜ່ານແດນ ແລະ ການທ່ອງທ່ຽວ ໃນ ສປປລາວ ເພີ່ມຂຶ້ນ. ສປປ ລາວ ຍັງໄດ້ກະກຽມເພື່ອຕອບສະໜອງຄວາມຕ້ອງການທີ່ເພີ່ມຂຶ້ນໂດຍຜ່ານໂຄງການຝຶກອົບຮົມ "ຈີນກຽມພ້ອມ" ໃນເມື່ອມໍ່ໆມານີ້ ທີ່ສະເໜີໂດຍສະຖາບັນສື່ມວນຊົນ, ວັດທະ ນະທຳ ແລະ ທ່ອງທ່ຽວ (IMCT) ເຊິ່ງແນໃສ່ເຈົ້າຂອງ ແລະ ຜູ້ຈັດການທຸລະກິດ SME ເພື່ອຈັດຫາສິ່ງທີ່ຕ້ອງການໄວ້ໃຫ້ແກ່ນັກທ່ອງທ່ຽວຈີນ.

366. **ສປປ ລາວ ມີທ່າແຮງປຽບທຽບໃນບັນດາທ່າອ່ຽງໃໝ່ ຂອງການຜະຈົນໄພລະດັບສູງ ຄື ການ ທ່ອງທ່ຽວ' ນອກວິຖີການທ່ອງທ່ຽວກະແສຫລັກ'.** ມີຈຳນວນນັກທ່ອງທ່ຽວຊັ້ນສູງເປັນຄອບຄົວທີ່ມາແບບອິດ ສະຫລະເພີ່ມຂຶ້ນ ເຊິ່ງມີຄວາມປະສົງທີ່ຈະ 'ຫຼີກເວັ້ນຝູງຊົນໃຫຍ່' ເພື່ອໄປຢ້ຽມຢາມສະຖານທີ່ທີ່ບໍ່ມັກມີຜູ້ເຂົ້າຊົມປານໃດ. ສປປ ລາວ ມີທິວທັດທີ່ເປັນເອກະລັກສະເພາະ, ສະຖານທີ່ປະຫວັດສາດ 'ທີ່ຍັງບໍ່ທັນໄດ້ຄົ້ນພົບ ແລະ ວັດວາອາຮາມທີ່ສຳຄັນ.[67]

## 7.5 ກາລະໂອກາດ ແລະ ສິ່ງທ້າທາຍ

### 7.5.1 ການທ່ອງທ່ຽວລາວແມ່ນຢູ່ທາງຄົບ ຂອງຫລາຍເສັ້ນທາງທີ່ມາບັນຈົບກັນ

367. **ສປປລາວ ມີກາລະໂອກາດ ທີ່ຈະເຮັດໃຫ້ ອຸດສາຫະກຳການທ່ອງທ່ຽວຟື້ນຕົວໄດ້ ຈາກຈຸດທີ່ຕົກຕໍ່າທີ່ສຸດທີ່ຜ່ານມາ.** ປັດໄຈທາງບວກປະກອບມີ: ເຈດຈຳນົງຂອງລັດຖະບານທີ່ໄດ້ສະແດງອອກໃນການທີ່ຈະເຮັດໃຫ້ການທ່ອງທ່ຽວເປັນໜຶ່ງໃນບຸລິມະສິດສຳລັບການພັດທະນາປະເທດ, ຍຸດທະສາດການເຕີບໂຕສີຂຽວທີ່ມີໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ຍຸດທະສາດການທ່ອງທ່ຽວແຫ່ງຊາດ. ຄວາມມຸ່ງມາດປາດຖະໜາຂອງນັກທ່ອງທ່ຽວທາງໄກຈາກເອີຣົບ

66. https://www.cnbc.com/2017/10/11/china-travel-tourists-embrace-less-conventional-locations-and-tailor-made-trips.html
67. ຍຸດທະສາດການຕະຫລາດການທ່ອງທ່ຽວ ຂອງກະຊວງ MOICT 2019-2022.

ແລະອາເມຣິກາເໜືອ ແລະ ຈາກທົ່ວໂລກທີ່ນັບມື້ເພີ່ມຂຶ້ນ, ແມ່ນເພື່ອສົ່ງເສີມການທ່ອງທ່ຽວທີ່ມີຈັນຍາບັນ ແລະ ຄວາມຍືນຍົງຫລາຍຂື້ນ. ສປປ ລາວ ຄື ພາບພົດ ຂອງຈຸດຫມາຍປາຍທາງການທອງທຽວທີ່ແທ້ຈິງ ແລະ ຍັງບໍ່ໄດ້ຖືກທຳລາຍ.

368. **ເມື່ອປະກອບກັບຍຸດທະສາດການຕະຫຼາດທີ່ມີເປົ້າໝາຍ ແລະ ມີປະສິດທິຜົນ, ການມີທີ່ຕັ້ງແບບນີ້ ຂອງລາວສະແດງເຖິງໂອກາດການພັດທະນາທີ່ໃຫຍ່ຫຼວງສຳລັບຂະແໜງທ່ອງທ່ຽວ.** ທ່າແຮງທີ່ເຂັ້ມແຂງຂອງການເຕີບໂຕອາດຈະໄດ້ຈາກການເພີ່ມການສົ່ງເສີມການທ່ອງທ່ຽວປະເພດ 'ນອກວິຖີການທ່ອງທ່ຽວກະ ແສຫລັກ' ແລະ ກໍ່ຍັງມີຫລາຍຈຸດ ແລະ ສະຖານທີ່ຄວນໄປຢ້ຽມຢາມທີ່ຍັງຖືກປົກປິດເຊື່ອງອຳໄວ້ຢູ່ ເຊິ່ງເປັນບ່ອນທີ່ມີເງື່ອນໄຂໄປສຳຜັດ ແລະ ພົວພັນໄດ້ຫຼາຍກັບຄົນທ້ອງຖິ່ນ. ຄຸນລັກສະນະເຫຼົ່ານີ້ແມ່ນພວມເພີ່ມຂຶ້ນເປັນທີ່ນິຍົມໃນບັນດານັກທ່ອງທ່ຽວທີ່ມີລາຍໄດ້ສູງ ແລະ ເປັນສັນຍາລັກຂອງໂອກາດການເຕີບໂຕ.[68]

369. **ປະເທດລາວຢູ່ໃກ້ກັບຕະຫຼາດທີ່ໃຫຍ່ຂອງຈີນ. ຕະຫຼາດພາກພື້ນທີ່ເພີ່ມຂື້ນຢ່າງໄວວາສ່ວນໃຫຍ່ແມ່ນໄດ້ຮັບການຊຸກຍູ້ຈາກຊຸດການທ່ອງທ່ຽວແບບມວນຊົນທີ່ມີລາຄາຕໍ່າ.** ເມື່ອຈຳນວນນັກທ່ອງທ່ຽວເຂົ້າມາເພີ່ມຂຶ້ນ, ມັນບໍ່ໄດ້ໝາຍເຖິງວ່າ ແນວໃດກໍ່ຈະເຮັດໃຫ້ມີວຽກເຮັດງານທຳຫລາຍຂຶ້ນຢ່າງມີໄນຍະສຳຄັນ ແລະ ມີການພັດທະນາຍືນຍົງສຳລັບໄລຍະຍາວ. ຍິ່ງໄປກວ່ານັ້ນ, ເມື່ອເວລາຜ່ານໄປ, ປະສົບການ ຂອງຜູ້ມາຢ້ຽມຊົມກໍ່ຈະມີຄຸນນະພາບດ້ອຍລົງໄປ ແລະ ກໍ່ຈະກັບກາຍເປັນຄວາມຫຍຸ້ງຍາກຫຼາຍຂຶ້ນທີ່ຈະດຶງດູດຕະຫຼາດທີ່ມີຄວາມຫຼາກຫຼາຍ (ລວມທັງນັກທ່ອງທ່ຽວທີ່ມີການໃຊ້ຈ່າຍສູງ). ການເພີ່ມປະລິມານນັກທ່ອງທ່ຽວຈະທ້າທາຍຄວາມສາມາດຂອງຈຸດໝາຍປາຍທາງທີ່ມີຄວາມສະດວກໃນການໄປເຖິງເຊິ່ງມີຈຳນວນ ໜ້ອຍ ແລະ ປະສົບກັບຄວາມກົດດັນທີ່ເພີ່ມຂື້ນໃນຈຸດສູງສຸດຂອງລະດູການທ່ອງທ່ຽວ. ຕົວຢ່າງ, ຫຼວງພະບາງອາດໃກ້ຈະຮອດຂີດຈຳກັດຂອງຄວາມສາມາດຂອງຕົນ.[69]

**7.5.2 ຄວາມສຳຄັນ ຂອງຍຸດທະສາດການຕະຫລາດທີ່ໄດ້ຜົນ**

370. **ຍັງບໍ່ເປັນທີ່ຮູ້ຈັກກັນທົ່ວໄປໃນໂລກວ່າ ສປປ ລາວ ກໍ່ເປັນແຫຼ່ງການທ່ອງທ່ຽວໜຶ່ງຂອງສາກົນ.** ສ່ວນໜຶ່ງຂອງເຫດຜົນ ກໍ່ແມ່ນມາຈາກການໂຄສະນາສົ່ງເສີມທີ່ຍັງຈຳກັດໃນເວທີສາກົນ, ການສະໜູນອງທຶນທີ່ຈຳກັດສຳລັບການຕະຫຼາດການທ່ອງທ່ຽວລະຫວ່າງປະເທດ ແລະ ການບໍ່ມີຍຸດທະສາດການຕະຫຼາດທີ່ຈະແຈ້ງ. ບົດສຶກສາທີ່ຜ່ານມາຫຼາຍສະບັບ (ແຜນການຄຸ້ມຄອງຈຸດໝາຍປາຍທາງຂອງສະວັດຄອນແທັກ, ການສຶກສາຂອງ CBI, ຍຸດທະສາດຂະແໜງການທ່ອງທ່ຽວ GMS/ADB, ຍຸດທະສາດກາຍີທໍ້ ແລະ ວັດທະນະທຳ ຕາມ QUO, ທະນາຄານໂລກກັບການພັດທະນາການທ່ອງທ່ຽວແບບທຳມະຊາດເປັນຂະ ແໜງຍຸດທະສາດເພື່ອການເຕີບໂຕສີຂຽວໃນ ສປປ ລາວ) ໄດ້ຍົກໃຫ້ເຫັນຈຸດແຂງທີ່ ສປປ ລາວ ຄວນ ເນັ້ນໃສ່ການເປັນ USPs (ຈຸດຂາຍທີ່ເປັນເອກະລັກ) ໃນຍຸດທະສາດການສື່ສານ(ສົ່ງເສີມການຕະຫລາດ) ຂອງຕົນ ແລະວິທີການທີ່ ສປປ ລາວ ຄວນປະຕິບັດເພື່ອດຶງດູດຕະຫຼາດເປົ້າໝາຍໃຫ້ປະສົບຜົນສຳເລັດ.

371. **ສປປ ລາວ ຕ້ອງ 'ກ້າວສູ່ດິຈິຕອນ' ແລະ ຂະຫຍາຍໂອກາດການທ່ອງທ່ຽວພາກພື້ນໃຫ້ໄດ້ຫລາຍທີ່ສຸດ.** ຮ່າງຍຸດທະສາດການທ່ອງທ່ຽວແຫ່ງຊາດ 2019-22 ຂອງ MOICT ໃຫ້ບຸລິມະສິດດ້ານການຕະຫຼາດ ແລະ ສະເໜີແນະ ສອງຂໍ້ລິເລີ່ມດ້ານການຕະຫຼາດໃໝ່ທີ່ສຳຄັນ. ອີງການຈັດຕັ້ງການຄຸ້ມຄອງປາຍທາງທີ່ປະສົບຜົນສຳເລັດຫຼາຍທີ່ສຸດໃນທົ່ວໂລກກຳລັງອຸທິດຫຼາຍກວ່າເຄິ່ງຫນຶ່ງຂອງງົບປະມານການຕະຫຼາດທັງຫມົດຂອງພວກເຂົາໃຫ້ກັບເລື່ອງດິຈິຕອນ.[70] ນັກການຕະຫຼາດການທອງທຽວຂອງລາວຕອງຄິດຄືນໃຫມກຽວກັບການອີງໃສແຜນພັບ, ໂປສເຕີ, ປ້າຍໂຄສະນາຕາມຖະຫນົນແລະງານວາງສະແດງສິນຄາ ແລະ ຕອງດຳເນີນການທາງດານການຕະຫຼາດອອນລາຍສວນໃຫຍໂດຍຫັນໄປສູດິຈິຕອນ. ການຕະຫຼາດອອນລາຍສາມາດເປັນຂໍ້ໄດ້ປຽບສຳລັບປະເທດລາວເພາະວ່າການປະດິດສ້າງ, ການສ້າງກາຍີທໍ້ທີ່ດີໃຫ້ຈຸດ ໝາຍປາຍທາງ ສາມາດຊົດເຊີຍໃຫ້ແກ່ການຂາດງົບປະມານ. ສປປ ລາວ ຕ້ອງຍາດແຍ່ງເອົາທ່າແຮງອັນໃຫຍ່ຫຼວງຂອງຕະຫຼາດຈີນ (ແລະຕະຫຼາດພາກພື້ນໂດຍທົ່ວໄປ) ແລະ ຖືເປັນບຸລິມະສິດໃນການດຶງດູດກຸ່ມຄົນໜຸ່ມທີ່ເກີດໃນຊຸມປີ 80 ຫລື 90 ທີ່ເດີນທາງເປັນສວນບຸກຄົນ ແລະ ມອງຫາການໜີອອກຈາກຄວາມເຄັ່ງຄຽດ ແລະ ມົນລະພິດຂອງຕົວເມືອງໃຫຍ່.

372. **ສປປ ລາວ ຕ້ອງສ້າງໃຫ້ມີຄວາມແຕກຕ່າງຈາກປະເທດເພື່ອນບ້ານ.** ຈຸດຂາຍທີ່ເປັນເອກະລັກສະເພາະອັນສຳຄັນທີ່ໄດ້ກຳນົດອອກແມ່ນບັນຍາກາດທີ່ບໍ່ເຮັ່ງຮີບຟ້າວຟັ່ງ, ງຽບສະຫງົດ, ສະຫງົບຮົ່ມເຢັນ, ຮູ້ສຶກສະບາຍຜ່ອນຄາຍ. ສິ່ງນີ້ແມ່ນຕ້ອງໃຫ້ສຳພັນກັນກັບການທີ່ປະເທດລາວມີພາບພົດ ເຊິ່ງຄືງຄວາມເປັນຂອງແທ້ທີ່ປະເທດມີການສື່ຄວາມໝາຍອອກມາ. ປະເທດລາວແມ່ນຈຸດຫມາຍປາຍທາງການເດີນທາງເພື່ອທີ່ຈະຢູ່ອາໄສເພື່ອເອົາປະສົບການທີ່ແທ້ຈິງ. ອັນນີ້ແມ່ນສອດຄ່ອງກັນຢ່າງເຕັມສ່ວນກັບຈຸດປະສົງຂອງການທ່ອງທ່ຽວແບບຍືນຍົງ, ທັງເປັນຮູບແບບດຽວຂອງການທອງທຽວທີ່ ເຮັດໃຫ້ຈຸດປະສົງການຫຼຸດຜ່ອນຄວາມທຸກຍາກແລະສ້າງວຽກເຮັດງານທຳບັນລຸຜົນຢ່າງແທ້ຈິງ, ໃນຂະນະທີ່ມີການອະນຸລັກຮັກສາຄວາມຮັ່ງມີທາງທຳມະຊາດ ແລະ ວັດທະນະທຳຂອງປະເທດ.

373. **ການເປັນຄູ່ຮ່ວມລະຫວ່າງພາກລັດ-ເອກະຊົນບໍ່ແໜ້ນແຟ້ນ ແລະ ຍັງຂາດສະພາການຕະຫຼາດການທ່ອງທ່ຽວ.** ການສຶກສາທີ່ຜ່ານມາກຽວກັບການສາງຍີ່ຫໍ້ຈຸດໝາຍປາຍທາງການທອງທຽວຂອງລາວແມ່ນໄປຖືກທິດແລ້ວ ແລະສະແດງໃຫ້ເຫັນວິທີທີ່ຈະໄດ້ປະຕິບັດຕາມ. ປັດຈຸບັນນີ້ແມ່ນມີຄວາມຈຳເປັນທີ່ສະພາການຕະຫຼາດທີ່ສາງເງື່ອນໄຂໃຫ້ເກີດການເປັນຄູ່ຮ່ວມລະຫວ່າງພາກລັດ ແລະ ເອກະຊົນ ຢ່າງແທ້ຈິງເພື່ອເພີ່ມທະວີການເຂົ້າຮ່ວມຂອງພາກເອກະຊົນໃຫ້ຫລາຍທີ່ສຸດໃນດ້ານການຕະຫຼາດແລະການສົ່ງເສີມການທ່ອງທ່ຽວ. ການຕິດຕໍ່ສື່ສານລະຫວ່າງພາກລັດ ແລະ ເອກະຊົນແມ່ນຍັງບໍ່ເຂັ້ມ

68. ວາລະສານອ້າງອີງຂອງຂະແໜງທ່ອງທ່ຽວ (ພາສາຝຣັ່ງ) L'Echo Touristique ວັນທີ 20 ຕຸລາ 2020
69. ການປະເມີນຜົນຄັ້ງສຸດທ້າຍ ລາວ/020
70. ແຜນການຄຸ້ມຄອງຈຸດໝາຍປາຍທາງ(ການທ່ອງທ່ຽວ) ຂອງ ສປປ ລາວ

ແຂວງໆແຮງໃນແຕ່ໃດໆມາ ແລະ ຜູ້ໃຫ້ສຳພາດເສຍດາຍກັບການຂາດການເປີດກ້ວາງ ຂອງພາກລັດ. ການທ່ອງທ່ຽວເປັນຂະ ແໜງການທີ່ສອດທ້ອຍໄປໃນທຸກວຽກງານ ເຊິ່ງຄວນຈະດຳເນີນການເປັນແບບທຸລະກິດການຄ້າ. ອັນນີ້ຮຽກຮ້ອງໃຫ້ມີການມີສ່ວນຮ່ວມ ແລະສະໜັບສະໜູນ ຂອງເອກະຊົນຢ່າງຫຼວງຫຼາຍ ເພື່ອໃຫ້ມີການຄຸ້ມຄອງທີ່ເປັນແບບທຸລະກິດແທນທີ່ຈະຖືກຈັດຕັ້ງປະຕິບັດໂດຍກົມກອງ ຂອງລັດຖະບານ. ຊ່ຽວຊານເອກະຊົນເປັນຜູ້ວາງຍຸດທະສາດ, ແລ້ວຍື່ນໃຫ້ກະຊວງທີ່ກ່ຽວຂ້ອງເພື່ອຂໍອະນຸມັດ. ການວິເຄາະຄວາມພະຍາຍາມທີ່ຜ່ານມາ ຄວນຈະຖືກນຳມາໃຊ້ເພື່ອໃຫ້ເຂົ້າໃຈວ່າເປັນຫຍັງຄະນະດັ່ງກ່າວຈຶ່ງຍັງບໍ່ໄດ້ສ້າງຕັ້ງພາຍຫຼັງໄດ້ມີການປຶກສາຫາລືມາຫຼາຍກວ່າ 10 ປີແລ້ວ. ຜົນປະໂຫຍດທີ່ຈະໄດ້ກັບອົງກອນນີ້ແມ່ນເພື່ອຮູ້ວ່າ MOICT ຈະຍອມຮັບທີ່ຈະເປີດກວ້າງຫຼາຍກວ່ານີ້, ເຊິ່ງໃນດ້ານວັດທະນະທຳຂອງການຄຸ້ມຄອງບໍລິຫານລັດຍອມສະ ແດງເຖິງການສູນເສຍການຄວບຄຸມທີ່ອາດຈະເກີດຂຶ້ນ ແລະ ການມີຄວາມໝັ້ນໃຈຫຼາຍຂຶ້ນໃນພາກເອກະຊົນ. ສະພາການຕະຫລາດຕ້ອງມີງົບປະມານພຽງພໍເພື່ອປະຕິບັດພາລະກິດຂອງຕົນ. ສະພາການຕະຫລາດເບື້ອງຕົ້ນຄາດວ່າຈະໄດ້ຮັບທຶນຈາກການເກັບຄ່າທຳນຽມ 2 ໂດລາສະຫາລັດຕໍ່ນັກທ່ອງທ່ຽວຕ່າງປະເທດທີ່ເຂົ້າມາໃນແຕ່ລະຄັ້ງ; ແນວໃດກໍ່ດີ, ມາດຕະການດັ່ງກ່າວຍັງບໍ່ທັນໄດ້ຮັບການປະຕິບັດຢ່າງຈະແຈ້ງ ແລະ ເປັນເອກະພາບ.

374. **ໜ່ວຍງານການທ່ອງທ່ຽວອາຊຽນ ແລະ ພາກພື້ນລຸ່ມແມ່ນ້ຳຂອງ GMS.** ສປປ ລາວ ຄວນຮັບປະກັນການເຂົ້າຮ່ວມຢ່າງໄດ້ຜົນດີໃນໜ່ວຍງານການທ່ອງທ່ຽວອາຊຽນ ແລະ GMS ເພື່ອຮັບປະກັນໃຫ້ໄດ້ໃຊ້ປະໂຫຍດຈາກຄວາມຊຳນານງານແນໃສ່ເສີມຂະຫຍາຍປະສິດທິຜົນການສົ່ງເສີມການຕະຫຼາດ ແລະ ເສີມທາງດ້ານພາບພົດຂອງວຽກດັ່ງກ່າວ. ການນຳໃຊ້ເວທີປະຊຸມແມ່ນ້ຳຂອງເພື່ອສົ່ງເສີມປະເທດແມ່ນບໍ່ມີຄ່າໃຊ້ຈ່າຍ ແລະ ຊ່ວຍໃຫ້ປະເທດລາວໄດ້ຮັບຜົນປະໂຫຍດຈາກພາບລັກຂອງຍີ່ຫໍ້ຂອງປະເທດເພື່ອນບ້ານ. ອັນນີ້ກໍ່ແມ່ນວິທີທີ່ດີເພື່ອຊຸກຍູ້ສົ່ງເສີມການທ່ອງທ່ຽວ ແລະ ການເຄື່ອນໄຫວຂອງຫຼາຍປະເທດ.

## 7.6 ຂໍ້ສະເໜີແນະ

**ຂໍ້ສະເໜີແນະຈາກການສຶກສາຜ່ານມາຍັງຄົງເຂົ້າປະເດັນແລະໃນປັດຈຸບັນກໍ່ຍິ່ງຮີບດ່ວນກວ່າເກົ່າ.**

375. **ປັບປຸງສະຖິຕິການທ່ອງທ່ຽວ.** ການຄາດຄະເນຄວາມມີໄນຍະສຳຄັນທາງເສດຖະກິດຂອງການທ່ອງທ່ຽວເຫັນວ່າມີການຄາດເຄື່ອນຢ່າງຫລວງຫລາຍ; ຍັງມີສ່ວນຕະຫຼາດທີ່ສຳຄັນເຊິ່ງຍັງບໍ່ໄດ້ມີການເກັບກຳຂໍ້ມູນທີ່ພຽງພໍ. ສິ່ງນີ້ເປັນການກີດກັ້ນການອອກແບບຍຸດທະສາດການຕະຫຼາດເພື່ອໃຫ້ແທດເໝາະກັບຕະ ຫຼາດຕົ້ນຕໍ.

376. **ເປີດບັ້ນການຕະຫຼາດທີ່ມີຄວາມຊ່ຽວຊານ ເພື່ອປະຕິບັດການສົ່ງເສີມການທ່ອງທ່ຽວແບບຍືນຍົງໃນ ສປປ ລາວ.** ວິໄສທັດທີ່ຈະແຈ້ງຂອງ MOICT ແມ່ນການພັດທະນາອຸດສາຫະກຳການທ່ອງທ່ຽວແບບຍືນຍົງ, ນຳໜ້າພາທາງ ເຊິ່ງຈະປະກອບສ່ວນໃຫ້ແກ່ການພັດທະນາເສດຖະກິດທ້ອງຖິ່ນທີ່ເນັ້ນການແກ້ໄຂຄວາມທຸກຍາກ ແລະ ໃຫ້ປະເທດກາຍເປັນຈຸດໝາຍປາຍທາງການທ່ອງທ່ຽວໜຶ່ງທີ່ເປັນທີ່ນິຍົມ ຂອງພາກພື້ນ ແລະ ຂອງໂລກ. ຊັບສິນຫຼັກ ແລະຈຸດຂາຍທີ່ເປັນເອກະລັກ (USPs) ຂອງ ສປປ ລາວ ລວມມີຄວາມເປັນຂອງແທ້, ການບໍລິການຕ້ອນຮັບແບບລາວ ແລະຊັບພະຍາກອນທຳມະຊາດ ແລະ ວັດທະ ນະທຳທີ່ຍັງຄົງຄວາມສວຍງາມໂດຍມີການອະນຸລັກຮັກສາມາເປັນຢ່າງດີ ແລະ ບັນຍາກາດທີ່ງຽບສະຫງົບ ແລະ ຜ່ອນຄາຍ. ໃນປັດຈຸບັນ ຈຳເປັນທີ່ຈະຕ້ອງໄດ້ສົ່ງເສີມຈຸດໝາຍປາຍທາງຢ່າງຈິງຈັງ ແລະ ໃຊ້ປະໂຫຍດໃຫ້ເຕັມທີ່ຈາກ USPs ເຫຼົ່ານີ້. ປະເທດເພື່ອນບ້ານຂອງ ສປປ ລາວ ແມ່ນເປັນທີ່ຮູ້ຈັກກັນດີກວ່າຫລາຍ. ມັນເປັນສິ່ງສຳຄັນທີ່ຈະໄດ້ຍົກລະດັບປະເທດໃຫ້ເປັນທີ່ຮູ້ຈັກໃນເວທີສາກົນຫລາຍຂຶ້ນໃນຖານະເປັນທີ່ເລທີ່ຕັ້ງທີ່ເພິ່ງປາດຖະໜາສຳລັບການທ່ອງທ່ຽວ. ຄວາມພະຍາຍາມເຫຼົ່ານີ້ຈະຕ້ອງໃຫ້ຊອກຮູ້ໄດ້ໂດຍທາງ ດິຈິຕອນບົນອິນເຕີເນັດເພື່ອໃຫ້ເຂົ້າເຖິງຜູ້ຊົມທີ່ກວ້າງທີ່ສຸດເທົ່າທີ່ເປັນໄປໄດ້. ທຸກວັນນີ້ນັກທ່ອງທ່ຽວທຸກຄົນໃຊ້ອິນເຕີເນັດ ແລະ ແອັບໃນມືຖືເພື່ອກະກຽມການເດີນທາງຂອງເຂົາເຈົ້າ ແລະ ສື່ສັງຄົມຍັງມີບົດບາດສຳຄັນໃນການເພີ່ມຄວາມຮັບຮູ້ ແລະ ເຜີຍແຜ່ຂໍ້ມູນຂ່າວສານກ່ຽວກັບປະສົບການຂອງນັກທ່ອງທ່ຽວ.

377. **ການຕິດຕໍ່ສື່ສານຈຳເປັນຕ້ອງໄດ້ປັບໃສ່ໃຫ້ເໝາະສົມກັບຕະຫຼາດສະເພາະ.** ອັນນີ້ປະກອບດ້ວຍການກຳນົດເອົາເປັນເປົ້າໝາຍສຳລັບຜູ້ທີ່ຄັ່ງໄຄ້ໃນການທ່ອງທ່ຽວແບບຍືນຍົງ, ຄົນທີ່ຊອກຫາປະສົບການທີ່ເປັນຂອງແທ້ເຊິ່ງຢູ່ຫ່າງຈາກຝູງຊົນ ແລະ ຫລີກອອກຈາກວິຖີການທ່ອງທ່ຽວກະແສຫລັກ(ທ່ຽວບ່ອນສອກ ຫລີກທີ່ຜູ້ອື່ນບໍ່ໄປຫລືໄປໜ້ອຍ). ການເພີ່ມທະວີດ້ານຄຸນນະພາບແທນທີ່ຈະແມ່ນດ້ານປະລິມານຈະສ້າງວຽກເຮັດງານທຳຫລາຍຂຶ້ນ, ຊຸກຍູ້ສົ່ງເສີມການເຕີບໂຕ ແລະ ສ້າງຂະແໜງການທ່ອງທ່ຽວທີ່ສາມາດກັບສູ່ສະພາບເດີມໄດ້ໄວຂຶ້ນ. ບັນຫານີ້ປະກອບມີການກຳໜົດເປັນເປົ້າໝາຍບັນດາລູກຄ້າລະດັບສູງທີ່ສ້າງລາຍໄດ້ຫຼາຍທີ່ສຸດ, ຜູ້ທີ່ເຕັມໃຈທີ່ຈະຢູ່ໄປດົນກວ່າ, ບັນດາບຸກຄົນແລະກຸ່ມຂະໜາດນ້ອຍ, ຊາວເອີຣົບ, ຊາວອາເມຣິກາເໜືອ ແລະລູກຄ້າໃນພາກພື້ນ. ສປປ ລາວ ມີກາລະໂອກາດທີ່ຈະໄດ້ຮັບຜົນປະໂຫຍດຈາກຄວາມສຳຄັນທີ່ນັບມື້ເພີ່ມຂຶ້ນຂອງກຸ່ມເຫຼົ່ານີ້ ໃນໄລຍະ 25 ປີຂ້າງໜ້າ. ຕະຫຼາດພາກພື້ນແລະຈີນເວົ້າສະເພາະຈະສືບຕໍ່ພັດທະນາໄປ. ສປປ ລາວ ຈະຕ້ອງວາງຍຸດທະສາດທີ່ເຈາະຈົງເປົ້າໝາຍເພື່ອປະຕິບັດໃຫ້ເປັນຈິງໃນສ່ວນແບ່ງຂອງຕະຫຼາດທີ່ເຕີບໃຫຍ່ນີ້.

378. **ການເປີດບັ້ນການຕະຫຼາດນີ້ ຈະຮຽກຮ້ອງໃຫ້ມີການຈັດຫາທຶນແລະມີຊັບພະຍາກອນດ້ານວິຊາການ ທີ່ມີຄຸນວຸດທິ ແລະ ປະສົບການເພື່ອຈະໃຫ້ປະສົບຜົນສຳເລັດ.** ສປປ ລາວ ໃຊ້ຈ່າຍໜ້ອຍກວ່າປະເທດເພື່ອນບ້ານ ໃນການສົ່ງເສີມການລົງທຶນ. ເພື່ອກ້າວໄປຂ້າງໜ້າ, GOL ຈະຕ້ອງຮັບປະກັນວ່າກິດຈະກຳນີ້ແມ່ນບຸລິມະສິດສຳລັບການສະໜອງທຶນ.

ສຳຄັນແມ່ນ ຜູ້ໃຫ້ທຶນ, ລັດຖະບານ ແລະ ພາກເອກະຊົນຈະຕ້ອງໄດ້ມີວິໄສທັດທີ່ຈະແຈ້ງກ່ຽວກັບການກຳນົດ ແລະ ຈັດຕັ້ງປະຕິບັດວິທີການທີ່ຍືນຍົງເພື່ອເຮັດໃຫ້ເຖິງຈຸດໝາຍ.

379. **ເພີ່ມປະສິດທິພາບການປຶກສາຫາລືພາກລັດ-ເອກະຊົນ**. ຜູ້ໃຫ້ສຳພາດມີການກ່າວເຖິງຕະຫລອດວ່າພາກລັດແລະເອກະຊົນຍັງຂາດການປຶກສາຫາລືກັນ. ເຖິງຢ່າງໃດກໍຕາມ, ການເຂົ້າໃຈຄວາມຕ້ອງການຂອງກັນແລະກັນເປັນຂໍກຸນແຈເພື່ອສ້າງການເປັນຄູ່ຮ່ວມພັດທະນາທີ່ມີຜົນລະຫວ່າງພາກລັດ ແລະ ເອກະຊົນ. ບໍ່ໄດ້ມີການປຶກສາຫາລືຢ່າງພຽງພໍກັບຜູ້ເຄື່ອນໄຫວຂອງພາກເອກະຊົນ ກ່ຽວກັບຍຸດທະສາດການຕະຫຼາດ ແລະ ລວມທັງການຈັດຕັ້ງປະຕິບັດ. ບັນດາສະມາຄົມວິຊາຊີບ, LATA (ສະມາຄົມທຸລະກິດທ່ອງທ່ຽວລາວ) ແລະ LHRA (ສະມາຄົມໂຮງແຮມ ແລະ ຮ້ານອາຫານລາວ) ມີງົບປະມານ ແລະ ອຳນາດການຮຽກປະຊຸມທີ່ຍັງຈຳກັດຫຼາຍ. ນອກຈາກນັ້ນ, ມີພຽງແຕ່ທຸລະກິດທ້ອງຖິ່ນຈຳນວນໜ້ອຍເທົ່ານັ້ນທີ່ເປັນສະມາຊິກຍ້ອນຄວາມຮັບຮູ້ວ່າສະມາຄົມວິຊາຊີບບໍ່ໄດ້ເປັນຕົວແທນຜົນປະໂຫຍດຂອງພວກເຂົາເຈົ້າ.

380. **ຈັດຕັ້ງປະຕິບັດການສ້າງຕັ້ງສະພາການຕະຫຼາດການທ່ອງທ່ຽວລາວ**. ມັນເປັນສິ່ງຈຳເປັນທີ່ຈະໃຫ້ມີການສ້າງສະພາການຕະຫຼາດການທ່ອງທ່ຽວລາວໂດຍເຕົ້າຮວມເອົາທຸກພາກສ່ວນ (ກະຊວງການທ່ອງທ່ຽວແລະກະຊວງທີ່ກ່ຽວຂ້ອງ, ສະພາການຄ້າແລະອຸດສາຫະກຳແຫ່ງຊາດລາວ, ສະມາຄົມວິຊາຊີບ ແລະທຸລະກິດເອກະຊົນ) ແລະ ເຮັດໃຫ້ສິ່ງທີ່ໄດ້ປຶກສາຫາລືກັນມາເປັນເວລາຫຼາຍປີນັ້ນກາຍເປັນຄວາມຈິງ. ໄດ້ມີການຮັບຮອງດ້ານຫຼັກການແລ້ວ ແລະ ການຈັດຕັ້ງປະຕິບັດແມ່ນມີຄວາມສຳຄັນ. ຈຸດປະສົງຂອງສະພາການຕະຫລາດແມ່ນເພື່ອສ້າງໃຫ້ມີ "ກົນໄກການມີສ່ວນກ່ຽວຂ້ອງຂອງພາກເອກະຊົນກັບພາກລັດ ໃນການເປັນຄູ່ຮ່ວມລະຫວ່າງພາກລັດ ແລະ ເອກະຊົນ ເພື່ອຈຸດປະສົງທາງການຕະຫຼາດ ແລະ ສົ່ງເສີມ ສປປ ລາວ ໃຫ້ເປັນຈຸດໝາຍປາຍທາງຂອງການທ່ອງທ່ຽວ. ມັນຈະເຮັດໃຫ້ພາກເອກະຊົນມີການກ່ຽວພັນຫລາຍທີ່ສຸດ ແລະ ພ້ອມທັງໃຫ້ຄຳປຶກສາດ້ານການຕະຫຼາດ ແລະ ການສົ່ງເສີມການທ່ອງທ່ຽວ ເພື່ອໃຫ້ລາວສືບຕໍ່ພັດທະນາເປັນຈຸດໝາຍປາຍທາງແຫ່ງການທ່ອງທ່ຽວທີ່ປະສົບຜົນສຳເລັດ, ມີຄວາມສາມາດແຂ່ງຂັນ, ມີກຳໄລ ແລະ ນັບມື້ຂະຫຍາຍຕົວເພື່ອຜົນປະໂຫຍດຂອງທຸກພາກສ່ວນທີ່ກ່ຽວຂ້ອງ.[71] ບັນດາຄູ່ຮ່ວມພາກເອກະຊົນເຊື່ອວ່າ: ການທ່ອງທ່ຽວແມ່ນຂະແໜງການທີ່ສ້ອຍຫ້ອຍໄປກັບຫລາຍວຽກງານ, ສະພາການຕະຫລາດຈຶ່ງຄວນຈະມີການຄຸ້ມຄອງຄືທຸລະກິດຕາມຕົວແບບຂອງສະພາທີ່ຄ້າຍຄືກັນຢູ່ໄທ ຫຼື ຫວຽດນາມ. ແຜນການຈັດຕັ້ງປະຕິບັດຄວນໄດ້ຮັບການສ້າງໂດຍຊ່ຽວຊານທີ່ປຶກສາຂອງພາກເອກະຊົນແລະຫຼັງຈາກນັ້ນຈຶ່ງນຳສະເຫນີໃຫ້ກະຊວງທີ່ຮັບຜິດຊອບເພື່ອທົບທວນຄືນແລະອະນຸມັດ. ຂໍ້ຕົກລົງກຳນົດໜ້າວຽກຄວນມີການປະເມີນອີກວິທີການໜຶ່ງສຳລັບການສະຫນອງທຶນໃຫ້ແກ່ຍຸດທະສາດການຕະຫຼາດ.

381. **ປັບປຸງສະພາບແວດລ້ອມທີ່ເອື້ອອຳນວຍ ແກ່ການດຳເນີນທຸລະກິດ**. ສະພາບແວດລ້ອມທາງທຸລະກິດຍັງຖືວ່າມີຄວາມຊັບຊ້ອນ ແລະ ຄຸມເຄືອ ເຊິ່ງແມ້ແຕ່ການຂໍໃບອະນຸຍາດດຳເນີນທຸລະກິດກໍ່ຍັງຍາກທີ່ຈະໄດ້ຮັບ. ຈຳເປັນຕ້ອງໃຫ້ນັກລົງທຶນເອກະຊົນຮູ້ສຶກເຊື່ອໝັ້ນຕື່ມ ເພາະ ພວກເຂົາເຈົ້າບໍ່ຮູ້ສຶກໄດ້ຮັບການສະໜັບສະໜູນຢ່າງພຽງພໍຈາກ GOL. ກົດໝາຍວ່າດ້ວຍການທ່ອງທ່ຽວໃນປັດຈຸບັນ ແມ່ນກວ້າງເກີນໄປ ແລະ ມີຂອບເຂດແບບລວມໆ. ມັນຮຽກຮ້ອງໃຫ້ມີຈຸດສຸມ ແລະລາຍລະອຽດສະເພາະກວ່ານີ້. ແຜນການປັບປຸງບັນດາລະບຽບການຄຸ້ມຄອງການທ່ອງທ່ຽວໃນປີ 2021 ແມ່ນໂອກາດເພື່ອເຮັດໃຫ້ຂັ້ນຕອນການ ຈັດຕັ້ງປະຕິບັດມີຄວາມງ່າຍດາຍ ແລະ ພ້ອມກັນນັ້ນກໍໃຫ້ເພີ່ມລາຍລະອຽດທີ່ຂາດຫາຍໄປ ເພື່ອໃຫ້ທຸກພາກສ່ວນນຳໃຊ້ກົດລະບຽບຕ່າງໆໃນລັກສະນະດຽວກັນ ໂດຍບໍ່ສາມາດຫລີກລ່ຽງໄດ້. ນອກນີ້ຍັງມີຄວາມຈຳເປັນເພື່ອຮັບປະກັນໃຫ້ມີການປະກາດໃຊ້ບັນດາດຳລັດ.

382. **ການເພີ່ມຊັບພະຍາກອນມະນຸດແມ່ນມີຄວາມຈຳເປັນ**. ການເຮັດໃຫ້ອຸດສາຫະກຳການທ່ອງທ່ຽວຂະຫຍາຍຕົວຮຽກຮ້ອງໃຫ້ມີແຮງງານທີ່ມີສີມືທີ່ໄດ້ຮັບການຝຶກອົບຮົມດ້ານການທ່ອງທ່ຽວແລະການຕ້ອນຮັບໃຫ້ມີຈຳນວນຫຼາຍຂຶ້ນ. ການປັບປຸງລະດັບສີມືແຮງງານເພື່ອໃຫ້ການບໍລິການທີ່ມີຄຸນນະພາບສູງຂຶ້ນຈະຊຸກຍູ້ໃຫ້ນັກທ່ອງທ່ຽວມີການພັກຢູ່ໃນປະເທດດົນກວ່າເກົ່າ. ທັງນີ້, ຍັງເປັນການໃຫ້ເຈົ້າໜ້າທີ່ລັດ ຮ່ວມກັບພາກສ່ວນກ່ຽວຂ້ອງກັບການທ່ອງທ່ຽວຂອງພາກເອກະຊົນມີຄວາມເຂົ້າໃຈກ່ຽວກັບການທ່ອງທ່ຽວແບບຍືນຍົງຫຼາຍຂຶ້ນ. ພະນັກງານລັດພາຍໃນອົງການສາຍຕັ້ງຕ່າງໆ ແລະ ຢູ່ຂັ້ນແຂວງອາດຈະໄດ້ຮັບຜົນປະໂຫຍດຈາກການຝຶກອົບຮົມສະເພາະດ້ານການທ່ອງທ່ຽວແບບຍືນຍົງ. ທັງນີ້, ຈະຊ່ວຍໃຫ້ມີການປະສານງານກັນດີຂຶ້ນ ແລະ ເປັນການຮັດແໜ້ນການຮ່ວມມືຂອງອົງການສາຍຕັ້ງພາກລັດ ໃນການວາງແຜນ ແລະ ຄຸ້ມຄອງການທ່ອງທ່ຽວແບບຍືນຍົງ ແລະ ແບບມີຄວາມຮັບຜິດຊອບເພື່ອເຮັດໃຫ້ແຫລ່ງທ່ອງທ່ຽວເປັນໜ້າຢູ່ໜ້າທ່ຽວຫລາຍຂຶ້ນ.

383. **ກຽມພ້ອມສຳລັບການຟື້ນຕົວຫຼັງ ໂຄວິດ-19**. ຂະແໜງການທ່ອງທ່ຽວໄດ້ຕັດທອນແຮງງານອອກໃນໄລຍະເວລາປິດເມືອງຫຼາຍຄັ້ງ, ໄລຍະມີຂໍ້ຈຳກັດດ້ານການເດີນທາງ ແລະຂໍ້ກຳນົດການກັກກັນໃນໄລຍະສອງປີທີ່ຜ່ານມາແລະໃນປັດຈຸບັນກໍ່ຍັງບໍ່ມີຄວາມແນ່ນອນກ່ຽວກັບໄລຍະເວລາຂອງການຟື້ນຕົວ. ໃນຂະນະທີ່ຍັງບໍ່ສາມາດກຳນົດໄດ້ຈຸດວັນເວລາວ່າຄວາມຕ້ອງການຈະຟື້ນຕົວເມື່ອໃດ, ແຕ່ສິ່ງສຳຄັນແມ່ນສັງເກດໄດ້ວ່າມັນຈະຟື້ນຕົວ. ແນວໃດກໍ່ຕາມ, ເມື່ອຄວາມຕ້ອງການການທ່ອງທ່ຽວຟື້ນຕົວ ກໍ່ຈະມີໂອກາດສ້າງວຽກເຮັດງານທຳຢ່າງຫຼວງຫຼາຍໃນ ສປປ ລາວ. ສປປ ລາວ ສາມາດກຽມຄວາມພ້ອມໃນດ້ານນີ້ ໂດຍຜ່ານການສືບຕໍ່ສ້າງຄວາມເຂັ້ມແຂງໃຫ້ແກ່ສະພາບແວດລ້ອມທາງທຸລະກິດ, ການເພີ່ມຈຳນວນພະນັກງານການບໍລິ ການຕ້ອນຮັບທີ່ໄດ້ຮັບການຝຶກອົບຮົມ, ການພັດທະນາ ແລະ ເປີດຕົວຍຸດທະສາດການຕະຫຼາດທີ່ຕໍ່ຍອດຈາກທ່າແຮງປຽບທຽບຂອງລາວ.

71. https://www.cnbc.com/2017/10/11/china-travel-tourists-embrace-less-conventional-locations-and-tailor-made-trips.html

384. **ການຟື້ນຕົວຫຼັງໂຄວິດ-19 ຈະຕ້ອງມີຂັ້ນຕອນການຈັດຕັ້ງປະຕິບັດທີ່ສ້າງຄວາມໝັ້ນໃຈໃຫ້ແກ່ນັກທ່ອງທ່ຽວສາກົນ.** ອັນນີ້ລວມເຖິງການມີຂັ້ນຕອນການປະຕິບັດງານແບບມາດຕະຖານທີ່ລະອຽດກ່ຽວກັບຄວາມປອດໄພດ້ານສຸຂະພາບທີ່ໄດ້ສື່ສານໃຫ້ກັບທຸກຄົນ; ສິ່ງນີ້ອາດຈະປະກອບມີຄວາມຈຳເປັນທີ່ຕ້ອງໄດ້ຮັບການສັກວັກຊີນ, ການໃສ່ໜ້າກາກ, ການກວດຫາເຊື້ອເມື່ອເດີນທາງມາເຖິງແລະລະບົບການຕິດຕາມການເດີນທາງໄປມາ, ການຮັກສາໄລຍະຫ່າງທາງສັງຄົມໃນຈຸດສູນກາງການຂົນສົ່ງລວມທັງສະໜາມບິນ, ສະຖານີລົດໄຟ, ໄລຍະການຂົນສົ່ງ, ທີ່ພັກ ແລະສະຖານທີ່ທ່ອງທ່ຽວ. ນັກທ່ອງທ່ຽວເຕັມໃຈຍອມຮັບຂໍ້ຈຳກັດເພື່ອຮັບປະກັນຄວາມປອດໄພຂອງພວກເຂົາ. ມາດຕະການທັງໝົດເຫຼົ່ານີ້ ຕ້ອງໄດ້ຮັບການເຜີຍແຜ່ສື່ສານຢ່າງຈະແຈ້ງ ເພື່ອສະແດງໃຫ້ເຫັນວ່າ ສປປ ລາວ ພ້ອມແລ້ວທີ່ຈະຕ້ອນຮັບນັກທ່ອງທ່ຽວອີກຄັ້ງຢ່າງປອດໄພ.

385. **ໃຫ້ບຸລິມະສິດຕະຫຼາດພາກພື້ນ.** ໃນໄລຍະສັ້ນ, ນັກທ່ອງທ່ຽວຄາດວ່າຈະຊື່ນຊອບການເດີນທາງໄລຍະໃກ້ (ບໍ່ເກີນ 5 ຊມ). ຕະຫຼາດພາກພື້ນຄວນຖືເປັນເປົ້າໝາຍບຸລິມະສິດ. ຄວນເລັ່ງລັດການເຈລະຈາສອງຝ່າຍຫຼືການເຈລະຈາໃນຂອບອາຊຽນ ເພື່ອເປີດຊ່ອງທາງໃນພາກພື້ນກັບບັນດາປະເທດທີ່ມີກໍລະນີຕິດ ເຊື້ອບໍ່ຫຼາຍປານໃດ ຫລື ບໍ່ມີກໍລະນີ. ເພື່ອດຶງດູດນັກທ່ອງທ່ຽວສາກົນຄືນໃໝ່, ບັນດາປະເທດອາຊຽນ ຫຼື GMS ຄວນພະຍາຍາມນຳໃຊ້ມາດຕະການດ້ານສາທາລະນະສຸກ ແລະ ຍຸດທະສາດການສື່ສານທີ່ໃຊ້ຄືກັນ ເຊິ່ງດັ່ງພໍທີ່ຈະໄດ້ຍິນ ຢູ່ໃນລະດັບສາກົນຫລາຍຂຶ້ນ.



# ບົດທີ 8 ອຸດສາຫະກຳປຸງແຕ່ງ ແລະ ເຂດເສດຖະກິດພິເສດ

386. **ລັດຖະບານຖືອຸດສາຫະກຳເບົາເປັນບຸລິມະສິດເພື່ອເປັນຕົວຂັບເຄື່ອນທີ່ສຳຄັນ ຂອງການເຕີບໂຕ.** ການພັດທະນາຂະແໜງການອຸດສາຫະກຳປຸງແຕ່ງແມ່ນອົງປະກອບທີ່ສຳຄັນຂອງຍຸດທະສາດການພັດທະນາ[72] 10 ປີຂອງ GOLs (2016-2025) ແລະ ວິໄສທັດ 2030 ເຊິ່ງມີຈຸດປະສົງເພື່ອໃຫ້ ສປປ ລາວ ບັນລຸສະຖານະພາບປະເທດລາຍໄດ້ປານກາງສູງ ດ້ວຍການເຕີບໂຕ[73] ທາງດ້ານເສດຖະກິດແບບຍືນຍົງ, ສີຂຽວ ແລະ ມີນະວັດຕະກຳ. ແຜນພັດທະນາ ຄັ້ງທີ 9 (2021-2025) ໄດ້ຍົກໃຫ້ເຫັນເຖິງຄວາມສຳຄັນຂອງການເພີ່ມທະວີການເຊື່ອມສຳພັນ ແລະ ການປະສານສົມທົບລະຫວ່າງຂະແໜງການກະສິກຳ ແລະ ອຸດສາຫະກຳ ແລະ ການນຳໃຊ້ເຕັກໂນໂລຊີຂໍ້ມູນຂ່າວສານ, ການສື່ສານ ແລະ ໂທລະຄົມມະນາຄົມ (ICT) ໃຫ້ມີປະສິດທິຜົນຫຼາຍຂຶ້ນ. ລັດຖະບານລາວຄາດວ່າ ການລົງທຶນໂດຍກົງຈາກຕ່າງປະເທດ ຂອງເອກະຊົນ (FDI) ຈະສືບຕໍ່ເປັນແຫຼ່ງຕົ້ນຕໍຂອງເງິນທຶນເຂົ້າປະເທດ ແລະ ການສ້າງວຽກເຮັດງານທຳ. ແຜນການພັດທະນາຄັ້ງທີ 9 ຄາດວ່າການລົງທຶນນີ້ຈະແນໃສ່ບັນດາເຂດເສດຖະກິດພິເສດ (SEZs) ເປັນຕົ້ນຕໍ ແລະ ວາງເປົ້າໝາຍການເຕີບໂຕດ້ານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳໃຫ້ໄດ້ 12%.

387. **ລັດຖະບານໃຫ້ບຸລິມະສິດອຸດສາຫະກຳເບົາທີ່ສົ່ງເສີມການສ້າງວຽກເຮັດງານທຳ ທີ່ຈະຂາຍອອກສູ່ຕະຫຼາດທ້ອງຖິ່ນ ແລະ ທົດແທນການນຳເຂົ້າ ແລະ ອຸດສາຫະກຳທີ່ຜະລິດເພື່ອສົ່ງອອກເປັນສ່ວນໜຶ່ງຂອງຕ່ອງໂສ້ມູນຄ່າຂອງພາກພື້ນ ຫຼື ຂອງໂລກ.** ແຜນການຄັ້ງທີ 9 ໄດ້ລະບຸເຖິງຂະແໜງການດັ່ງນີ້: ອາຫານ ແລະ ເຄື່ອງດື່ມ, ແຜ່ນແພ ແລະ ເຄື່ອງຕັດຫຍິບ, ເຄື່ອງກໍ່ສ້າງ, ປຸງແຕ່ງກະສິກຳ, ຜະລິດຕະພັນປ່າໄມ້, ການປຸງແຕ່ງໂລຫະ ແລະ ອະໂລຫະ, ສານເຄມີ, ເຄື່ອງເອເລັກໂຕຣນິກ ແລະ ເຄື່ອງໃຊ້ໄຟຟ້າ, ພາຫະນະ ແລະ ເຄື່ອງກົນຈັກ ແລະ ເຄື່ອງມືກະສິກຳ, ການພິມ ແລະ ການຫຸ້ມຫໍ່.

388. **ໃນໄລຍະທົດສະວັດທີ່ຜ່ານມາ, ຂະແໜງການອຸດສາຫະກຳປຸງແຕ່ງໄດ້ມີການຂະຫຍາຍຕົວຢ່າງໄວວາດ້ວຍການລົງທຶນໃນຊິ້ນສ່ວນປະກອບເຄື່ອງໄຟຟ້າ ແລະ ເອເລັກໂຕຣນິກທີ່ຕັ້ງຢູ່ໃນເຂດເສດຖະກິດພິເສດເປັນສ່ວນຫລາຍ.** ໃນ 10 ປີທີ່ສິ້ນສຸດປີ 2019, ການສົ່ງອອກສ່ວນປະກອບເຄື່ອງເອເລັກໂຕຣນິກໄດ້ເພີ່ມຂຶ້ນຈາກ 1,6 ລ້ານໂດລາສະຫະລັດ ຂຶ້ນເປັນ 400 ລ້ານໂດລາ. ອັນນີ້ແມ່ນກິດຈະກຳການປະກອບຊິ້ນສ່ວນເປັນສ່ວນໃຫຍ່ລວມມີທັງເຄື່ອງຈັກຮັບໃຊ້ໃນຫ້ອງການ, ຊິ້ນສ່ວນກ້ອງຖ່າຍຮູບ, ຊິ້ນສ່ວນປະກອບເຄື່ອງເອເລັກໂຕຣນິກ ແລະ ເຄື່ອງອາໄຫລ່ລົດ. ໃນໄລຍະ 2015-2019, ການສົ່ງອອກ ຂອງອຸດສາຫະກຳປຸງແຕ່ງໄດ້ເຕີບໂຕໄວກວ່າການສົ່ງອອກລວມຢ່າງມີໄນຍະສຳຄັນ ຄືທີ່ 80% ແລະ 59% ຕາມລຳດັບ. ການສົ່ງອອກ ຂອງອຸດສາຫະກຳປຸງແຕ່ງໃນປັດຈຸບັນ ກວມເອົາຫນຶ່ງສ່ວນສີ່ ຂອງການສົ່ງອອກທັງຫມົດ. ອຸດສາຫະກຳປຸງແຕ່ງກວມເອົາ 7,5 ສ່ວນຮ້ອຍຂອງມູນຄ່າເພີ່ມໃນປີ 2019.

389. **ອຸດສາຫະກຳປຸງແຕ່ງຢູ່ນອກເຂດເສດຖະກິດພິເສດແມ່ນສຸມໃສ່ເຄື່ອງດື່ມ, ສາຍເຄເບີ້ນ, ເຄື່ອງນຸ່ງຫົ່ມ ແລະ ເຄື່ອງເຟີນີເຈີ.** 4 ຂະແໜງດັ່ງກ່າວເຫລົ່ານີ້ ກວມເອົາເຄິ່ງໜຶ່ງຂອງມູນຄ່າເພີ່ມທັງໝົດ ໃນການສຳຫຼວດສະຖານປະກອບການ[74] ດ້ານອຸດສາຫະກຳປຸງແຕ່ງໃນລະດັບຊາດ (2015); ເຄື່ອງດື່ມແລະສາຍໄຟທີ່ບໍ່ແມ່ນໂລຫະ ແລະ ສາຍເຄເບີ້ນແມ່ນຂະແຫນງທີ່ໃຫຍ່ທີ່ສຸດເຊິ່ງກວມເອົາ 22 ແລະ 21 ສ່ວນຮ້ອຍຂອງມູນຄ່າເພີ່ມຕາມລຳດັບ. ເຄື່ອງນຸ່ງຫົ່ມ, ໄມ້ ແລະ ເຄື່ອງເຟີນີເຈີ ແລະ ການປຸງແຕ່ງສະບຽງອາຫານແຕ່ລະປະເພດກວມເອົາປະມານ 10 ສ່ວນຮ້ອຍຂອງມູນຄ່າເພີ່ມ, ຢາງພາລາ ແລະ ປະລາສຕິກ 5 ສ່ວນຮ້ອຍ ແລະ ແຜ່ນແພ ແລະ ໂລຫະຮູບປະພັນ ແຕ່ລະຢ່າງແມ່ນ 4 ສ່ວນຮ້ອຍ. ວິສາຫະກິດອຸດສາຫະກຳປຸງແຕ່ງສ່ວນໃຫຍ່, ຢູ່ນອກເຂດ SEZ, ຈ້າງຄົນງານໜ້ອຍກວ່າ 50 ຄົນ, ໃນນັ້ນ 37 ສ່ວນຮ້ອຍຂອງວິສາຫະກິດທັງໝົດມີແຮງງານໜ້ອຍກວ່າ 10 ຄົນ. ມີ 700 ກວ່າບໍລິສັດ (5 ສ່ວນຮ້ອຍຂອງຈຳນວນທັງໝົດ) ໄດ້ຈ້າງຄົນງານຫຼາຍກວ່າ 200 ຄົນ. ໃນປີ 2015, ມີພຽງ 2,9 ສ່ວນຮ້ອຍ (378 ໃນຈຳນວນ 13.148) ຂອງວິສາຫະກິດອຸດສາຫະກຳປຸງແຕ່ງທັງໝົດທີ່ຢູ່ນອກເຂດ SEZ ໄດ້ດຳເນີນການສົ່ງອອກ. ເມື່ອແບ່ງອອກເປັນສ່ວນແບ່ງຂອງການຜະລິດທັງໝົດທີ່ສົ່ງອອກ, ມີພຽງແຕ່ 1,3 ສ່ວນຮ້ອຍ ເປັນຜູ້ສົ່ງອອກ 100 ສ່ວນຮ້ອຍ, ສ່ວນອີກ 0,8 ສ່ວນຮ້ອຍ ແມ່ນຂາຍຫຼາຍກວ່າເຄິ່ງຫນຶ່ງຂອງການຜະລິດເພື່ອສົ່ງອອກຂອງຕົນ. ບໍລິສັດທີ່ຕ່າງປະເທດເປັນເຈົ້າຂອງ ຫຼືບໍລິສັດຮ່ວມທຶນກວມເອົາເກືອບ 60 ສ່ວນຮ້ອຍຂອງວິສາຫະກິດທີ່ຜະລິດເພື່ອສົ່ງອອກເທົ່ານັ້ນ.

## ຄວາມສາມາດແຂ່ງຂັນໃນລະດັບວິສາຫະກິດ

390. **ວິສາຫະກິດຂອງ ສປປ ລາວ ສ່ວນຫຼາຍແມ່ນວິສາຫະກິດປະເພດ SMEs ເຊິ່ງມີເຕັກໂນໂລຊີຕ່ຳ, ຜະລິດຕະພາບຕ່ຳ.** ໂດຍຫຼັກການ, ບັນດາວິສາຫະກິດໃນປະເທດພວມພັດທະນາອາດຈະໄດ້ຮັບຜົນປະໂຫຍດຈາກເຕັກໂນໂລຊີທີ່ທັນສະໄໝ, ເຕັກນິກການຜະລິດ ແລະ ພາກປະຕິບັດການຄຸ້ມຄອງທີ່ດີເພື່ອໃຫ້ເຂດເສດຖະກິດພິເສດສາມາດແຂ່ງຂັນຢູ່ພາຍໃນ ແລະ ກັບຕ່າງປະເທດ.[75] ໃນທາງປະຕິບັດ, ວິສາຫະກິດຂະໜາດນ້ອຍ ແລະຂະໜາດກາງທີ່ຄົນໃນທ້ອງຖິ່ນເປັນເຈົ້າຂອງສ່ວນໃຫຍ່ ຢູ່ໃນບັນດາປະເທດທີ່ກຳລັງພັດທະນາ ຖືວ່າຍັງເຄື່ອນໄຫວຂ້ອນຂ້າງຫ່າງຈາກລະດັບປະເທດທີ່ດຳເນີນການດີທີ່ສຸດຂອງໂລກ. ໃນຂະນະທີ່ບັນດາບໍລິສັດໃຫຍ່ທີ່ຕ່າງປະເທດເປັນເຈົ້າຂອງ ແລະບໍລິສັດຮ່ວມທຶນທີ່ເຊື່ອມໂຍງກັບຕ່ອງໂສ້ມູນຄ່າຂອງໂລກ (GVC), ມີການຂາຍເຂົ້າສູ່ຕະຫຼາດສາກົນ ແລະມີຄວາມສາມາດແຂ່ງຂັນໃນເວທີໂລກ.

72. ຍຸດທະສາດແຫ່ງຊາດກ່ຽວກັບການພັດທະນາເສດຖະກິດ-ສັງຄົມ 2025 ທີ່ແນໃສ່ສ້າງລວມຍອດລາຍໄດ້ແຫ່ງຊາດໃຫ້ເປັນສອງເທົ່າໃນປີ 2020.
73. ຕັ້ງເປົ້າວ່າຈະເພີ່ມລາຍໄດ້ແຫ່ງຊາດໃຫ້ໄດ້ 4 ເທົ່າຕົວໃນປີ 2030.
74. ອັນນີ້ບໍ່ໄດ້ລວມເອົາວິສາຫະກິດທີ່ຕັ້ງຢູ່ໃນບັນດາເຂດເສດຖະກິດພິເສດ.
75. ສິ່ງນີ້ໄດ້ມີການອ້າງເຖິງໂດຍ Gerschenkron (1962) ວ່າເປັນ "ຜົນດີຂອງຄວາມຫລ້າຫລັງ".

ການປັບປຸງຫຼືຍົກລະດັບວິສາຫະກິດທ້ອງຖິ່ນໂດຍຜ່ານການຍົກລະດັບພຶດຕິກຳ, ການດຳເນີນທຸລະກິດແລະຜົນການປະຕິບັດງານຂອງພວກເຂົາແມ່ນເປົ້າຫມາຍອັນໜຶ່ງທີ່ສຳຄັນຂອງ GOL.

391. **ການເພີ່ມຄຸນນະພາບ ແລະ ຜະລິດຕະພາບ ເປັນປັດໄຈຫຼັກໃນການເພີ່ມຄວາມສາມາດໃນການແຂ່ງຂັນໃນຕະຫຼາດພາຍໃນ ແລະ ຕ່າງປະເທດ ຂອງບັນດາວິສາຫະກິດ SME.** ບົດ DTIS ກ່ອນຫນ້ານີ້ (2012) ໄດ້ຊີ້ໃຫ້ເຫັນຄວາມສຳຄັນຂອງການແກ້ໄຂຂໍ້ຈຳກັດສະເພາະທີ່ພາກເອກະຊົນປະສົບບັນຫາຢູ່. ຂໍ້ຈຳກັດຫຼາຍຢ່າງອາດຈະໄດ້ຮັບການແກ້ໄຂໂດຍການປະຕິຮູບ ຂອງພາກລັດທີ່ແນໃສ່ປັບປຸງສະພາບແວດລ້ອມການດຳເນີນທຸລະກິດແລະຫຼຸດຜ່ອນຕົ້ນທຶນໃຫ້ການຄ້າໂດຍຜ່ານການປັບປຸງການເຂົ້າເຖິງຂໍ້ມູນຂ່າວ ສານ, ກຳຈັດຄວາມຮຽກຮ້ອງຕ້ອງການທີ່ເກີນຄວາມຈຳເປັນ ແລະ ຊ້ຳຊ້ອນ ແລະ ຕັດຂັ້ນຕອນເພື່ອໃຫ້ມີປະສິດທິພາບດີຂຶ້ນ, ແນວໃດກໍ່ຕາມ, SMEs ຍັງຜະເຊີນກັບຂໍ້ຈຳກັດສະເພາະໃນການເຂົ້າເຖິງປັດໄຈຮັບໃຊ້ການຜະລິດ (ເຊັ່ນ: ແຮງງານ, ທຶນຮອນ, ວັດຖຸປະກອນຮັບໃຊ້ການຜະລິດທີ່ນຳເຂົ້າ), ການເຂົ້າເຖິງຕະຫຼາດຜົນຜະລິດ (ພາຍໃນ ແລະ ຕ່າງປະເທດ) ແລະ ການມີຄວາມຮູ້ຄວາມຊຳນານ ຫຼື ຄວາມສາມາດທາງທຸລະກິດ.

392. **ການແກ້ໄຂບັນຫາໃນລະດັບວິສາຫະກິດ ແມ່ນແນໃສ່ເພີ່ມປະສິດທິພາບ ແລະ ຄວາມສາມາດໃນການຫາກຳໄລ, ການສ້າງຄວາມຮູ້ຄວາມສາມາດໃນການຄຸ້ມຄອງກໍ່ເປັນປະເດັນສຳຄັນ.** ການແກ້ໄຂບັນຫາຢູ່ເບື້ອງການສະຫນອງ (ຫລື ການຜະລິດ-ທຸລະກິດ) ເນັ້ນຄົ້ນຫາການແກ້ໄຂຄວາມລົ້ມເຫຼວຂອງຕະຫຼາດໃນການເຂົ້າເຖິງແຫລ່ງເງິນທຶນຂອງວິສາຫະກິດ, ການໄດ້ຮັບການສະໜອງແຮງງານທີ່ເຫມາະສົມ ແລະ ປະສິດທິພາບການຄຸ້ມຄອງ (ບາງຄັ້ງເອີ້ນວ່າຄວາມສາມາດໃນການເຄື່ອນໄຫວທຸລະກິດ). ການແກ້ໄຂບັນຫາຢູ່ເບື້ອງຄວາມຕ້ອງການ (ຫລື ຕະຫລາດ ແລະການຊົມໃຊ້) ແມ່ນສຸມໃສ່ການປັບປຸງການເຂົ້າເຖິງຕະຫຼາດໂດຍຜ່ານການຊ່ວຍໃຫ້ເຂົ້າເຖິງເຄືອຂ່າຍສາກົນ (ການເຊື່ອມຕໍ່ກັບ GVCs), ໂດຍຜ່ານການສົ່ງເສີມການເຊື່ອມຕໍ່, ສ້າງຄວາມໄວ້ວາງໃຈ ແລະການແກ້ໄຂບັນຫາອື່ນໆ. ຄວາມສາມາດດຳເນີນທຸລະກິດຂອງວິສາຫະກິດຫຼືຄວາມຮູ້ວິທີເຮັດຕົວຈິງແມ່ນຕົວກຳນົດທີ່ສຳຄັນວ່າທຸລະກິດຈະປະສົບຜົນສຳເລັດ ແລະເຕີບໂຕໄດ້ຫລືບໍ່. ຜູ້ປະກອບການຈຳນວນຫຼາຍຮຽນຮູ້ຈາກເພື່ອນມິດ ຂອງເຂົາເຈົ້າຫຼືຈາກການເຮັດວຽກຢູ່ໃນວິສາຫະກິດ. ຜູ້ໃຫມ່ທີ່ເຂົ້າມາສູ່ວົງການ ອາດຈະໄດ້ຮັບການແນະນຳຈາກວິສາຫະກິດຂະຫນາດໃຫຍ່ ເຊິ່ງຈະເປັນຜູ້ທີ່ຖ່າຍທອດທັກສະ ແລະເຕັກໂນໂລຊີ. ຢູ່ ສປປ ລາວ ມີວິສາຫະກິດຂະໜາດໃຫຍ່ໜ້ອຍທີ່ສຸດ ແລະ ນອກຈາກບໍລິສັດເຄື່ອງນຸ່ງຫົ່ມແລ້ວ ວິສາຫະກິດສົ່ງອອກຂະໜາດໃຫຍ່ສ່ວນຫລາຍແມ່ນຕັ້ງຢູ່ໃນເຂດເສດຖະກິດພິເສດ. ບໍລິສັດ SME ສ່ວນໃຫຍ່ ແມ່ນຜະລິດເພື່ອຕະຫຼາດທ້ອງຖິ່ນແລະບໍ່ໄດ້ເຊື່ອມຕໍ່ກັບວິສາຫະກິດຂະຫນາດໃຫຍ່ທີ່ມີປະສົບການຫຼາຍທີ່ສາມາດຊ່ວຍໃນການສ້າງຄວາມສາມາດໃນການດຳເນີນທຸລະກິດ. SMEs ຍັງສາມາດຮຽນຮູ້ຈາກຄູຝຶກ ແລະຊ່ຽວຊານທີ່ປຶກສາພາຍນອກທີ່ໃຫ້ການຝຶກອົບຮົມ ແລະຄຳແນະນຳທີ່ໄດ້ປັບໃຫ້ເໝາະສົມກັບຄວາມຕ້ອງການ ຂອງວິສາຫະກິດແຕ່ລະລາຍ, ແທນທີ່ຈະໃຫ້ ການຝຶກອົບຮົມຕາມແບບ ຂອງຄູຝຶກ. ການສຸມໃສ່ໃຫ້ຄຳແນະນຳແລະຄວາມຮູ້ເຮັດຕົວຈິງແກ່ວິສາຫະກິດທີ່ເຕັມໃຈທີ່ຈະປະກອບສ່ວນຊັບພະຍາກອນ ຂອງຕົນເອງບາງສ່ວນ ກໍ່ຖືວ່າຈະເພີ່ມໂອກາດທີ່ເປັນໄປໄດ້ທີ່ການຝຶກອົບຮົມນັ້ນ ຈະສົ່ງຜົນໃຫ້ເກີດຜົນການປະຕິບັດງານທີ່ດີຂຶ້ນ.

393. **ທຶນສົມທົບເພື່ອຊ່ວຍເຫລືອທຸລະກິດ ຂອງລາວມີເປົ້າໝາຍເລັ່ງໃສ່ແກ້ໄຂຂໍ້ຈຳກັດໃນລະດັບວິສາ ຫະກິດ.** ໂຄງການພັດທະນາການຄ້າ ໄລຍະທີສອງ (TDF-2) ໄດ້ສະໜອງທຶນຊ່ວຍເຫຼືອລ້າເພື່ອສົມທົບແກ້ໄຂຂໍ້ຈຳກັດສະເພາະທີ່ພາກເອກະຊົນໄດ້ລະບຸວ່າເປັນຂໍ້ຈຳກັດຫຼັກໃນການປັບປຸງຄວາມສາມາດໃນການ ແຂ່ງຂັນຂອງເຂົາເຈົ້າ. ອັນນີ້ເອີ້ນວ່າ: (ໂຄງການ)ທຶນສົມທົບເພື່ອສົ່ງເສີມທຸລະກິດ (BAF) ແລະ ມີການຈັດໃຫ້ມີການແກ້ໄຂໃນລະດັບວິສາຫະກິດເພື່ອປັບປຸງຜະລິດຕະພາບໂດຍຜ່ານການເສີມສ້າງຄວາມສາມາດໃນການດຳເນີນທຸລະກິດຂອງວິສາຫະກິດ. BAF ໄດ້ເລີ່ມຕົ້ນໃນປີ 2013 ແລະດຳເນີນການເປັນເວລາສີ່ປີ. ໃນຂະນະທີ່ BAF ຄັ້ງທີ 2 (BAF II) ໄດ້ເລີ່ມຂຶ້ນໃນປີ 2019 ແລະ ມີກຳນົດຈະດຳເນີນເປັນເວລາ 5 ປີ. ຕາມປົກກະຕິການແກ້ໄຂບັນຫາ ແມ່ນລວມມີການສະຫນັບສະຫນູນທຸລະກິດແລະການບໍລິການພັດທະ ນາທຸລະກິດ, ການໃຫ້ຄຳປຶກສາ, ການສ້າງເຄືອຂ່າຍ, ການເຂົ້າເຖິງເຕັກໂນໂລຊີທີ່ທັນສະໄຫມ. ສິ່ງນີ້ເປັນການຕື່ມເສີມໃຫ້ແກ່ນະໂຍບາຍ ແລະ ແຜນງານທີ່ປະຕິບັດເພື່ອກະຕຸ້ນໃນເບື້ອງຄວາມຕ້ອງການຂອງຕະ ຫຼາດ ເຊິ່ງມີເປົ້າຫມາຍເພື່ອຫຼຸດຜ່ອນຕົ້ນທຶນໃຫ້ການຄ້າໂດຍ ເຮັດໃຫ້ NTBs ມີຄວາມກະທັດຮັດງ່າຍດາຍ, ການຫຼຸດຜ່ອນອັດຕາພາສີ ແລະ ການປັບປຸງການເຂົ້າເຖິງຕະຫຼາດໂດຍຜ່ານບັນດາສັນຍາການຄ້າ.

394. **BAF II ສະໜັບສະໜູນວິສາຫະກິດສ່ວນບຸກຄົນເພື່ອເພີ່ມທັກສະແລະປະສົບການຂອງພວກເຂົາເພື່ອໃຫ້ພວກເຂົາສາມາດເຕີບໂຕ ແລະ ແຂ່ງຂັນໄດ້ດີຂຶ້ນ.** BAF II ໃຫ້ບໍລິການຄຳປຶກສາ ໂດຍກົງແກ່ບໍລິສັດໃດໜຶ່ງຂອງ ສປປ ລາວ ໂດຍບໍ່ມີຄ່າຕອບແທນ ແລະໃຫ້ການຊ່ວຍເຫຼືອເປັນທຶນສົມທົບ ເພື່ອເຮັດໃຫ້ວິສາຫະກິດສາມາດຊື້ບໍລິການພັດທະນາທຸລະກິດສະເພາະເພື່ອສົ່ງເສີມການຂະຫຍາຍຕົວຂອງເຂົາເຈົ້າ. BAF II ແມ່ນບໍ່ຍຶດກັບຂະແຫນງການໃດໜຶ່ງແບບເຈາະຈົງ ແລະມີການດຳເນີນການໄປໃນທົ່ວປະເທດ ແລະຢ່າງຫນ້ອຍ 40 ສ່ວນຮ້ອຍຂອງຜູ້ໄດ້ຮັບທຶນແມ່ນວິສາຫະກິດຍິງເປັນຜູ້ນຳພາ. ມາຮອດທ້າຍເດືອນຕຸລາ 2021, ຜູ້ໄດ້ຮັບອະນຸມັດທຶນຊ່ວຍເຫລືອ ມີຫຼາຍກວ່າ 215 ເປົ້າໝາຍ, ມີ 124 ລາຍແມ່ນໄດ້ຮັບການເບີກຈ່າຍ ແລະ BAF II ໄດ້ດຳເນີນການປະເມີນເປັນລາຍບໍລິສັດໄປ ໄດ້ເຖິງ 1.230 ແຫ່ງ. ວິສາຫະກິດທີ່ໄດ້ຮັບການສະຫນັບສະຫນູນສ່ວນໃຫຍ່ເຂົ້າໃຈການບໍລິການທີ່ມີໃຫ້ໃນເວລາທີ່ພວກເຂົາເຂົ້າມາຫາ BAF II, ຖືວ່າຄຳແນະນຳຂອງທີມງານ BAF ກ່ຽວກັບຍຸດທະສາດທຸລະກິດ ແມ່ນເປັນປະໂຫຍດ ແລະໄດ້ຈັດອັນດັບການສະຫນັບສະຫນູນໃນລະດັບຄຸນນະພາບແຕ່ກາງ ເຖິງ ສູງ. ເງິນຊ່ວຍເຫຼືອລ້າໄດ້ຖືກນຳໃຊ້ເພື່ອປັບປຸງຍີ່ຫໍ້ ແລະການຕະຫຼາດ (27,6 ສ່ວນຮ້ອຍ), ICT ແລະຂະບວນການເຮັດວຽກພາຍໃນ (19 ສ່ວນຮ້ອຍ) ແລະປັບປຸງປະສິດທິພາບການຜະລິດ ແລະຄວາມສາມາດແຂ່ງຂັນ (19 ສ່ວນຮ້ອຍ). ການບໍລິການໃຫ້ຄຳປຶກສາສ່ວນຫຼາຍແມ່ນສະໜອງໃຫ້ໂດຍບໍລິສັດຂອງຄົນລາວ. ການສຳຫຼວດການ

ປະເມີນຜົນກະທົບຂອງ BAF II ໄດ້ສະເໜີແນະຫົກຂໍ້ສໍາລັບການປັບປຸງ ແລະເພີ່ມຂອບເຂດການເຂົ້າເຖິງເປົ້າໝາຍ ແລະ ການສ້າງໃຫ້ມີຜົນກະທົບຕໍ່ທຸລະກິດ. ສິ່ງເຫຼົ່ານີ້ແມ່ນໄດ້ລະບຸໄວ້ຢູ່ຂ້າງລຸ່ມນີ້. ຮ່າງແຜນດໍາເນີນງານການພັດທະນາການຄ້າແລະພາກເອກະຊົນໄດ້ສະເໜີແນະໃຫ້ຂະຫຍາຍໂຄງການສະໜອງທຶນເພື່ອສົ່ງເສີມທຸລະກິດ ເພື່ອແກ້ໄຂຂໍ້ສະເໜີແນະເຫຼົ່ານີ້ ແລະ ຄົ້ນຫາໂອກາດເພື່ອຊຸກຍູ້ສົ່ງເສີມສາຍພົວພັນທາງການຄ້າກັບຜູ້ສົ່ງອອກໃນລາວ ເພື່ອອໍານວຍຄວາມສະດວກໃຫ້ແກ່ການຖ່າຍທອດຄວາມຮູ້ ແລະ ເຕັກໂນໂລຊີ ໃນວຽກງານ.

## ກ່ອງເນື້ອຄວາມ 8.1 ຂໍ້ສະເໜີແນະຈາກການປະເມີນ

1. ຕັ້ງໃຫ້ພາສາລາວເປັນຄ່າທີ່ເລືອກໄວ້ແລ້ວໃນເວບໄຊຂອງ BAF
2. ສ້າງຕັ້ງຫ້ອງການສາຂາໃນຈຸດສຸມທາງເສດຖະກິດຢູ່ຕ່າງແຂວງ
3. ສ້າງໃຫ້ມີຍຸດທະສາດຕື່ມເພື່ອເຜີຍແຜ່ຂໍ້ມູນຂ່າວສານຂອງໂຄງການ BAF ເພື່ອໃຫ້ໄປເຖິງທຸລະກິດ ທີ່ເຂົ້າເຖິງຍາກ
4. ຕັ້ງເປັນໂກຕາສໍາລັບທຸລະກິດເປົ້າໝາຍ (ເຊັ່ນ ວິສາຫະກິດຢູ່ຕ່າງແຂວງ, ຈຸນລະວິສາຫະກິດ)
5. ປັບປຸງ ແລະ ຂະຫຍາຍຈໍານວນລວມຂອງຜູ້ໃຫ້ບໍລິການດ້ານການພັດທະນາທຸລະກິດ
6. ປັບປຸງຄວາມມີໄຫວພິບ(ຍືດຫຍຸ່ນແຫລມ) ທາງທຸລະກິດ ຂອງວິສາຫະກິດທີ່ BAF ໄດ້ໃຫ້ການສະໜັບສະໜູນ

395. **ນັບແຕ່ປີ 2000 ເປັນຕົ້ນມາ, ລັດຖະບານໄດ້ໃຫ້ບູລິມະສິດການພັດທະນາເຂດເສດຖະກິດພິເສດ ໂດຍມີເປົ້າໝາຍດຶງດູດການລົງທຶນໂດຍກົງຈາກຕ່າງປະເທດ (FDI).** ລັດຖະບານໄດ້ກໍານົດໃຫ້ມີ 13 SEZ; ແນວໃດກໍ່ຕາມ, ມີພຽງແຕ່ຈໍານວນໜ້ອຍເທົ່ານັ້ນທີ່ມີການເຄື່ອນໄຫວໃນປັດຈຸບັນ. ມາຮອດປັດຈຸບັນ, ການລົງທຶນຕົ້ນຕໍແມ່ນຈາກໄທ ແລະ ຈີນ ໄດ້ສຸມໃສ່ກິດຈະການທີ່ມີມູນຄ່າເພີ່ມຕໍ່າເຊິ່ງກິດຈະການຫລັກຢູ່ຕ່າງປະເທດໄດ້ແບ່ງມາຕັ້ງຢູ່ລາວເພື່ອໃຊ້ບໍລິການພາຍນອກໂດຍສະເພາະການໃຊ້ປະໂຫຍດຈາກຄ່າແຮງງານທີ່ຕໍ່າກວ່າທຸງບໃສ່ບັນດາພື້ນຖານເສດຖະກິດເພື່ອນບ້ານ. SEZ ແຫ່ງທໍາອິດແມ່ນໄດ້ພັດທະນາຢູ່ແຂວງສະຫວັນນະເຂດ ແລະ ແນໃສ່ດຶງດູດການລົງທຶນພາຍໃນ ແລະ ຕ່າງປະເທດ ຕາມເສັ້ນທາງເລກ 9 ຈາກຂົວມິດຕະພາບ ແຂວງສະຫວັນນະເຂດ, ໄປຫາວຽດນາມ. ພື້ນຖານໂຄງລ່າງແມ່ນລັດຖະບານສະໜອງໃຫ້. ໃນປີ 2010, ນາຍົກລັດຖະມົນຕີ ໄດ້ອອກດໍາລັດວ່າດ້ວຍ ເຂດເສດຖະກິດພິເສດ ເຊິ່ງໄດ້ສ້າງຕັ້ງອົງການຂອງລັດຖະບານໃໝ່ 2 ແຫ່ງ ເພື່ອນໍາພາການພັດທະນາ ແລະ ຄຸ້ມຄອງເຂດເສດຖະກິດພິເສດ. ໃນປີ 2016 ອົງການຈັດຕັ້ງເຫຼົ່ານີ້ໄດ້ຖືກໂອນໄປຢູ່ພາຍໃຕ້ການຊີ້ນໍາໂດຍກົງຂອງກະຊວງແຜນການ ແລະ ການລົງທຶນ (MPI) ແລະ ຄະນະກໍາມະການແຫ່ງຊາດສໍາລັບເຂດເສດຖະກິດພິເສດ.

## ຕາຕະລາງ 8.1 ເຂດເສດຖະກິດພິເສດ ຂອງ ສປປ ລາວ

| ລ/ດ | SEZ | ທີ່ຕັ້ງ | ຂະໜາດ (ກມ2) | ຈໍານວນ ວິສາຫະກິດ | ປະເພດ | ສ້າງຕັ້ງ/ຍົກລະດັບ |
|---|---|---|---|---|---|---|
| 1 | ສະຫວັນ-ເຊໂນ | ແຂວງສະຫວັນນະເຂດ | 9,54 | 74 | ອຸດສາຫະກໍາ | 2003 |
| 2 | ບໍ່ເຕັນ | ຫລວງນໍ້າທາ | 16,40 | 14 | ການຄ້າ & ໂລຊິດສະຕິກ | 2003/2012 |
| 3 | ສາມຫລ່ຽມຄໍາ | ແຂວງບໍ່ແກ້ວ | 30,00 | 59 | ທ່ອງທ່ຽວ & ຕົວເມືອງ | 2007/2014 |
| 4 | ວີຕາ ພາກ | ນະຄອນຫລວງວຽງຈັນ | 1,0 | 38 | ອຸດສາຫະກໍາ | 2009/2010 |
| 5 | ພູຂຽວ | ແຂວງຄໍາມ່ວນ | 48,50 | 16 | ອຸດສາຫະກໍາ | 2010 |
| 6 | ໄຊເສດຖາ | ນະຄອນຫລວງວຽງຈັນ | 10,00 | 9 | ອຸດສາຫະກໍາ | 2010/2011 |
| 7 | ທາດຫລວງ | ນະຄອນຫລວງວຽງຈັນ | 3,65 | 13 | ທ່ອງທ່ຽວ & ຕົວເມືອງ | 2011 |
| 8 | ລອງແທ້ງ | ນະຄອນຫລວງວຽງຈັນ | 5,58 | 4 | ທ່ອງທ່ຽວ & ຕົວເມືອງ | 2008/2012 |
| 9 | ດົງໂພສີ | ນະຄອນຫລວງວຽງຈັນ | 0,54 | 2 | ການຄ້າ & ໂລຊິດສະຕິກ | 2009/2012 |
| 10 | ທ່າແຂກ | ແຂວງຄໍາມ່ວນ | 10,35 | 18 | ການຄ້າ & ໂລຊິດສະຕິກ | 2012 |
| 11 | ຈໍາປາສັກ | ແຂວງຈໍາປາສັກ | 8,00 | 8 | ອຸດສາຫະກໍາ | 2015 |
| 12 | ຫລວງພະບາງ | ແຂວງຫລວງພະບາງ | 48,50 | | ທ່ອງທ່ຽວ & ຕົວເມືອງ | 2016 |
| 13 | ຊຽງຂວາງ | ແຂວງຊຽງຂວາງ | 261,96 | | ການຄ້າ & ໂລຊິດສະຕິກ | |

*ໝາຍເຫດ: ຈໍານວນວິສາຫະກິດທີ່ໄດ້ສ້າງຕັ້ງ 2003-2015. ຫລວງພະບາງ ແລະ ຊຽງຂວາງກໍ່ຖືກອະນຸມັດໃຫ້ມີ SEZ ແຕ່*

*ຍັງບໍ່ທັນໄດ້ພັດທະນາ. ຮອດປີ 2019 ເຂດສະຫວັນ-ເຊໂນມີ 103 ວິສາຫະກິດມາລົງທຶນ ມີການຈ້າງງານເຖິງ 5.000 ຕໍາແໜ່ງງານ, ເຂດຂອງບໍ່ແກ້ວມີ 81 ວິສາຫະກິດ ມີແຮງງານຕ່າງປະເທດ 7.963 ຕໍາແໜ່ງງານ ແລະ ເຂດຂອງຫລວງນໍ້າທາ ມີແຮງງານຕ່າງປະເທດ 2.520 ຕໍາແໜ່ງ.*

*ແຫລ່ງທີ່ມາ: ຫ້ອງການຄຸ້ມຄອງ ແລະ ສົ່ງເສີມ SEZ, ກະຊວງແຜນການ ແລະ ການລົງທຶນ ແລະ IOM (2019).*

396. **SEZs ມີຄວາມປະສົງທີ່ຈະສ້າງວຽກເຮັດງານທໍາ, ຖ່າຍທອດທັກສະ ແລະ ເຕັກໂນໂລຊີ, ປະກອບສ່ວນສ້າງລາຍຮັບໃຫ້ລັດຖະບານ ແລະ ເລັ່ງການຈະເລີນເຕີບໂຕທາງດ້ານເສດຖະກິດ.** ມີ 11 SEZ ທີ່ກໍາລັງເຄື່ອນໄຫວຢູ່ (ເບິ່ງ ຕາຕະລາງ 8.1). ຮອດປີ 2019, ມີ 380 ວິສາຫະກິດທີ່ດໍາເນີນກິດຈະການໃນເຂດເສດຖະກິດພິເສດ ແລະ ມີຄົນງານເຮັດວຽກປະມານ 20.000 ຄົນ (ເຂດເສດຖະກິດພິເສດ IOM, 2019). ຄົນງານຕ່າງປະເທດກວມເອົາກວ່າເຄິ່ງໜຶ່ງ ຂອງຕໍາແໜ່ງງານທີ່ສ້າງຂຶ້ນ, ແຮງງານລາວມີທັງໝົດ 9.000 ຄົນ, ປະມານ 0,5% ຂອງກໍາລັງແຮງງານທັງໝົດ.[76] ວິສາຫະກິດເຫຼົ່ານີ້ມີທຶນຈົດທະບຽນ 8 ຕື້ໂດລາເຊິ່ງສະທ້ອນໃຫ້ເຫັນວ່າການສະເໜີລົງທຶນທີ່ຍື່ນຕໍ່ MPI ແມ່ນໃຫຍ່ກວ່າການລົງທຶນຕົວຈິງ. ໃນປີ 2016, ການລົງທຶນລວມຢູ່ໃນເຂດເສດຖະກິດພິເສດແມ່ນ 1,6 ຕື້ໂດລາ ໂດຍນັກລົງທຶນເອກະຊົນກວມເອົາປະມານ 80 ສ່ວນຮ້ອຍ. ໃນໄລຍະທົດສະວັດທໍາອິດ, ນັກພັດທະນາເຂດກວມເອົາເກືອບ 80 ສ່ວນຮ້ອຍຂອງການລົງທຶນ; ແນວໃດກໍ່ຕາມ, ແຕ່ປີ 2015-2016 ມັນໄດ້ຫຼຸດລົງເຖິງ 40 ສ່ວນຮ້ອຍ ແລະນັກລົງທຶນເອກະຊົນມີພຽງ 39 ສ່ວນຮ້ອຍເທົ່ານັ້ນ. ການລົງທຶນຂອງພາກເອກະຊົນຕໍ່າກວ່າ 30 ສ່ວນຮ້ອຍເລັກນ້ອຍ ແມ່ນຢູ່ໃນອຸດສາຫະກໍາປຸງແຕ່ງ, 38 ສ່ວນຮ້ອຍໃນການບໍລິການ ແລະ 34 ສ່ວນຮ້ອຍໃນການຄ້າ ແລະ ໂລຊິດສະຕິກ. ໃນໄລຍະປີ 2003-2016, ຜູ້ລົງທຶນລາຍໃຫຍ່ສຸດ 5 ລາຍແມ່ນມາຈາກຈີນ (58%), ໄທ (20%), ຫວຽດນາມ (11%), ອາເມລິກາ (9%), ຍີ່ປຸ່ນ (1%). ນັກລົງທຶນສ່ວນຫລວງຫລາຍ ສຸມໃສ່ 2 ເຂດເສດຖະກິດ ຄື ສະຫວັນນະເຂດ-ເຊໂນ ແລະ ສາມຫລ່ຽມຄໍາ.

397. **ເຂດເສດຖະກິດພິເສດສ່ວນຫຼາຍແມ່ນຢູ່ໃນ ຫຼື ໃກ້ກັບນະຄອນຫຼວງວຽງຈັນ, ເຖິງແມ່ນວ່າເຂດຕ່າງໆໄດ້ສ້າງຕັ້ງຢູ່ໃນອີກ 6 ແຂວງແລ້ວ.** ປະມານ 75 ສ່ວນຮ້ອຍຂອງບໍລິສັດທີ່ຕັ້ງຢູ່ໃນເຂດດັ່ງກ່າວແມ່ນເປັນຂອງຕ່າງປະເທດ. SEZ ສອງແຫ່ງ ແມ່ນຢູ່ໃກ້ກັບຊາຍແດນຈີນ; ສໍາລັບຢູ່ບໍ່ແກ້ວ ແລະ ຫຼວງນໍ້າທາ ແມ່ນນັກລົງທຶນຈີນເປັນຜູ້ພັດທະນາ ແລະ ຄຸ້ມຄອງ ແລະ ມີການຈ້າງງານແຮງງານຕ່າງປະເທດເປັນສ່ວນໃຫຍ່ ຢູ່ໃນເຂດເສດຖະກິດພິເສດ.

## ຮູບທີ 8.1 ຈໍານວນວິສາຫະກິດຢູ່ໃນເຂດເສດຖະກິດພິເສດ ປີ 2019




*ແຫລ່ງທີ່ມາ: ຫ້ອງການຄຸ້ມຄອງ ແລະ ສົ່ງເສີມ SEZ, ກະຊວງແຜນການ ແລະ ການລົງທຶນ*

398. **ກົງຈັກການຈັດຕັ້ງທີ່ຍັງບໍ່ເຂັ້ມແຂງພໍໃນການປະຕິບັດພາລະບົດບາດຂອງຕົນ ເຮັດໃຫ້ບໍ່ສາມາດເຫັນໄດ້ເຖິງເພດຜົນຂອງການສ້າງ SEZ ຂຶ້ນມາ.** ການໃຫ້ເຫດຜົນຂອງ ສປປ ລາວ ໃນການນໍາເອົາ SEZ ມາໃຊ້ ລວມມີການສ້າງວຽກເຮັດງານທໍາ, ການສ້າງຄວາມຫຼາກຫຼາຍຂອງການຜະລິດ, ການດຶງດູດການລົງທຶນຈາກຕ່າງປະເທດ ແລະ ການຖ່າຍທອດເຕັກໂນໂລຊີ, ໂດຍຜ່ານການເຮັດໃຫ້ຂັ້ນຕອນ ແລະ ລະບຽບການຕ່າງໆພາຍໃນເຂດທີ່ກໍານົດໄວ້ມີຄວາມກະທັດຮັດງ່າຍດາຍ ແລະ ສະດວກວ່ອງໄວ. SEZs ຕ້ອງການນະໂຍບາຍ, ກົດລະບຽບ ແລະຄໍາແນະນໍາທີ່ກໍານົດອອກຢ່າງຊັດເຈນ. ຢູ່ ສປປ ລາວ ນິຕິກໍາທີ່ມີຢູ່ນີ້ ແມ່ນຍັງຂາດຄວາມໂປ່ງໃສ ແລະ ຈະແຈ້ງໃນຫຼາຍຂົງເຂດ. ບໍ່ມີນະໂຍບາຍທີ່ລະບຸໄວ້ກ່ຽວກັບສິ່ງ

76. ໃນການສໍາຫລວດກໍາລັງແຮງງານ ຂອງ ສປປ ລາວໃນປີ 2017 ໄດ້ຄາດຄະເນກໍາລັງແຮງງານຢູ່ທີ່ 1,94 ລ້ານຄົນ.

ອຳນວຍຄວາມສະດວກ ຂອງພາກເອກະຊົນທີ່ຈຳເປັນຕ້ອງໃຫ້ມີໃນແຕ່ລະ SEZ; ຍັງບໍ່ຊັດເຈນວ່າໃຜເປັນຜູ້ຕິດຕາມການຈັດຕັ້ງປະຕິບັດແລະບໍ່ມີການປຶກສາຫາລືກ່ຽວກັບວິທີການສືບສວນແລະການຄວບຄຸມດູແລວ່າຈະດຳເນີນການໄປແນວໃດ. ຈຸດປະສົງແມ່ນເພື່ອໃຫ້ SEZ ໃຫ້ບໍລິການປະຕູດຽວ One Stop Shop (OSS) ແຕ່ການບໍລິການສະເພາະພັດບໍ່ໄດ້ຖືກກຳນົດ. ຂັ້ນຕອນການຍື່ນຄຳຮ້ອງຂໍລົງທຶນໃນ SEZ ແມ່ນມີຄວາມຫຍຸ້ງຍາກຍ້ອນວ່າມັນກ່ຽວຂ້ອງກັບຫຼາຍອົງການ ແລະ ມີການອະນຸມັດຫຼາຍດ້ານ. ກະຊວງຊັບ ພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມອອກໃບຢັ້ງຢືນການນຳໃຊ້ທີ່ດິນ SEZ ແລະ ເປັນຜູ້ຮັບ ຜິດຊອບກ່ຽວກັບລະບຽບການນຳໃຊ້ທີ່ດິນ ແລະ ກຳນົດເຂດ. ສິ່ງທ້າທາຍຕົ້ນຕໍທີ່ໂຄງການ SEZ ປະສົບບັນຫາຢູ່ ແມ່ນໄດ້ລະບຸໄວ້ຢູ່ຂ້າງລຸ່ມນີ້.

## ກ່ອງເນື້ອຄວາມ 8.2 ສິ່ງທ້າທາຍ ຂອງເຂດເສດຖະກິດພິເສດ ຂອງ ສປປ ລາວ

- ແຜນງານຍັງຂາດຈຸດສູມທາງດ້ານຍຸດທະສາດ
- SEZ ຈຳນວນຫລາຍທີ່ມີຢູ່ທົ່ວໄປໃນຫລາຍບ່ອນ, ເຊິ່ງຫລາຍແຫ່ງກໍ່ບໍ່ໄດ້ຕັ້ງຢູ່ຈຸດໃຈກາງ (ຫ່າງໄກສອກຫລີກໂພດ)
- ສປປ ລາວ ຂາດຄວາມສາມາດໃນການຈັດສັນການລົງທຶນຂອງລັດທີ່ຈຳເປັນເຂົ້າໃສ່ການສ້າງພື້ນຖານໂຄງລ່າງ ເຊັ່ນ ເສັ້ນທາງເຂົ້າເຖິງ ແລະ ສາທາລະນຸປະໂພກ ຫລື ການຈ່າຍຄ່າຊົດເຊີຍແກ່ປະຊາຊົນທີ່ໄດ້ສູນເສຍທີ່ດິນຂອງຕົນ
- ຂໍ້ຈຳກັດດ້ານທັກສະ ພາຍໃນກຳລັງແຮງງານ ຂອງ ສປປ ລາວ
- ຊ່ອງຂ່າຍທາງດ້ານກົດໝາຍພໍ່ພຽງພໍ ແລະ ພາລະໜັກເກີນໄປໃນການປະຕິບັດລະບຽບການ (ຄວາມສັບສົນດ້ານພາລະບົດບາດ)
- ການຈັດຕັ້ງປະຕິບັດທີ່ຂັດແຍ່ງກັນ ແລະ ຂາດຄວາມຊັດເຈນດ້ານການຕິດຕາມ ແລະ ປະເມີນຜົນ
- ການນຳໃຊ້ລະບົບການໃຫ້ສຳປະທານຢ່າງກວ້າງຂວາງເປັນການຈຳກັດທາງເລືອກຂອງການຈັດຫາທຶນ ແລະ ຢັບຢັ້ງການແກ່ງແຍ່ງແຂ່ງຂັນ

399. **ຂະບວນການຍື່ນຂໍ້ສະເໜີເພື່ອຂໍເປັນ SEZ ເປັນພາລະທີ່ໜັກໜ່ວງ ແລະ ໃຊ້ເວລາດົນ. ຂະບວນການຍື່ນເອກະສານແມ່ນໃຊ້ເວລາຫຼາຍ.** ນັກລົງທຶນຍື່ນຂໍ້ສະເໜີໂຄງການໃຫ້ OSSU. ພາຍຫຼັງການປະເມີນຂອງ OSSU, ເອກະສານຈະຖືກສົ່ງໃຫ້ອົງການປົກຄອງທ້ອງຖິ່ນ, ຄະນະກຳມະການສົ່ງເສີມແລະປົກປ້ອງການລົງທຶນ ແລະກະຊວງແຜນການແລະການລົງທຶນ. ພາຍຫຼັງມີການຮັບຮອງຈາກອຳນາດການປົກຄອງທ້ອງຖິ່ນ, ເອກະສານຈະກັບຄືນໄປຫາຄະນະກຳມະການສົ່ງເສີມແລະປົກປ້ອງການລົງທຶນ, ເຊິ່ງເປັນຜູ້ຮັບຊາບແລະຈົດບັນທຶກການອະນຸມັດເອົາໄວ້ແລະສົ່ງຄືນໃຫ້ MPI ເພື່ອການອະນຸມັດສຸດທ້າຍ.

400. **ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ( IPL) ສະບັບປັບປຸງປີ 2016 ໄດ້ກຳນົດ 9 ຂະແໜງ ການບູລິມະສິດທີ່ມີສິດໄດ້ຮັບນະໂຍບາຍສົ່ງເສີມ (ສະແດງຢູ່ໃນກ່ອງເນື້ອຄວາມ 8.3).** ນອກເໜືອໄປຈາກຂະແໜງທຸລະກິດບູລິມະສິດເຫຼົ່ານີ້, IPL ຍັງເປີດຊ່ອງທາງໃຫ້ມີການພິຈາລະນາການໃຫ້ນະໂຍບາຍສົ່ງ ເສີມສຳລັບການລົງທຶນທີ່ສູງກວ່າມູນຄ່າໃດໜຶ່ງທີ່ແນ່ນອນຫຼືໃນເຂດສະເພາະໃດໜຶ່ງ ແລະການລົງທຶນສຳປະທານ. IPL ຍັງອະນຸຍາດໃຫ້ມີການໃຫ້ "ນະໂຍບາຍສົ່ງເສີມພິເສດ" ເພີ່ມເຕີມທີ່ໂຄງການສະເພາະອາດຈະຕ້ອງການ. ນະໂຍບາຍສົ່ງເສີມທີ່ສຳຄັນທີ່ສຸດທີ່ IPL ສະເໜີໃຫ້ລວມມີການຍົກເວັ້ນພາສີ ແລະ ການຫລຸດຜ່ອນອາກອນກຳໄລ, ການຍົກເວັ້ນຄ່າພາສີສຳລັບການນຳເຂົ້າວັດຖຸປະກອບຮັບໃຊ້ການຜະລິດ, ການເສຍ VAT ໃນອັດຕາສູນສ່ວນຮ້ອຍ ສຳລັບວັດຖຸປະກອບຮັບໃຊ້ການຜະລິດນຳເຂົ້າເຫຼົ່ານີ້, ການເສຍ VAT ໃນອັດຕາສູນສ່ວນຮ້ອຍສຳລັບວັດຖຸດິບພາຍໃນບາງອັນ ແລະການຍົກເວັ້ນພາສີ / ອາກອນສຳລັບການສົ່ງອອກວັດຖຸດິບ.

## ກ່ອງເນື້ອຄວາມ 8.3 ບັນດາຂະແໜງການບູລິມິສິດ ຂອງ SEZ

1. ການນຳໃຊ້ເຕັກໂນໂລຊີທັນສະໄໝ, ການຄົ້ນຄວ້າວິໄຈວິທະຍາສາດ, ການຄົ້ນຄວ້າ ແລະ ການພັດທະນາ (R&D), ການນຳໃຊ້ນະວັດຕະກຳ, ເປັນມິດກັບສິ່ງແວດລ້ອມ ແລະ ການນຳໃຊ້ຊັບພະຍາກອນທຳມະຊາດ ແລະ ພະລັງງານຢ່າງມີປະສິດທິພາບ

2. ກະສິກຳສະອາດ ປອດສານພິດ, ການຜະລິດແນວພັນພືດ, ແນວພັນສັດ, ການພັດທະນາປ່າໄມ້, ການປົກປັກຮັກສາສິ່ງແວດລ້ອມ, ກິດຈະການສົ່ງເສີມການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ

3. ອຸດສາຫະກຳປຸງແຕ່ງຜະລິດຕະພັນກະສິກຳທີ່ເປັນມິດຕໍ່ສິ່ງແວດລ້ອມ, ອຸດສາຫະກຳປຸງແຕ່ງຫັດຖະກຳທີ່ເປັນມູນເຊື້ອ ແລະ ເອກະລັກຂອງຊາດ

4. ການພັດທະນາອຸດສາຫະກຳທ່ອງທ່ຽວທຳມະຊາດ, ວັດທະນະທຳທີ່ເປັນມິດກັບສິ່ງແວດລ້ອມ ແລະ ຍືນຍົງ

5. ການສຶກສາ ແລະ ກິລາກາຍະກຳ, ການພັດທະນາຊັບພະຍາກອນມະນຸດ ແລະ ພັດທະນາສີມືແຮງງານ, ການຝຶກອົບຮົມວິຊາຊີບ

6. ການສ້າງໂຮງໝໍທັນສະໄໝ, ໂຮງງານຜະລິດຢາ ແລະ ອຸປະກອນການແພດ, ການຜະລິດ ແລະປິ່ນປົວດ້ວຍຢາພື້ນເມືອງ

7. ການລົງທຶນ, ການພັດທະນາພື້ນຖານໂຄງລ່າງສາທາລະນະປະໂຫຍດ ເພື່ອແກ້ໄຂການສັນຈອນແອອັດໃນຕົວເມືອງ ແລະ ບ່ອນຢູ່ອາໄສ, ການກໍ່ສ້າງພື້ນຖານໂຄງລ່າງຮັບໃຊ້ໃຫ້ແກ່ການຜະລິດກະສິກຳ ແລະ ອຸດສາຫະກຳ, ການບໍລິການຂົນສົ່ງສິນຄ້າ, ບໍລິການທາງຜ່ານ ແລະ ເຊື່ອມໂຍງລະຫວ່າງປະເທດ

8. ທະນາຄານນະໂຍບາຍ ແລະ ສະຖາບັນການເງິນຈຸລະພາກເພື່ອແກ້ໄຂຄວາມທຸກຍາກຂອງປະຊາຊົນ ແລະ ຊຸມຊົນທີ່ບໍ່ສາມາດເຂົ້າເຖິງແຫລ່ງເງິນທຶນ

9. ສູນການຄ້າທັນສະໄໝທີ່ສົ່ງເສີມຜະລິດຕະພັນພາຍໃນ ແລະ ຍີ່ຫໍ້ທີ່ມີຊື່ສຽງຂອງໂລກ, ສູນວາງສະແດງ ແລະ ຕະຫລາດນັດສຳລັບຜະລິດຕະພັນພາຍໃນ.

401. **ນະໂຍບາຍທີ່ມີຢູ່ ແລະ ຂໍ້ກຳນົດການໃຫ້ລາຍງານແມ່ນຈຳກັດການແຂ່ງຂັນ. ທຸລະກິດໃນ SEZ ຕ້ອງໄດ້ລາຍງານປະຈຳເດືອນແທນທີ່ຈະເປັນປະຈຳງວດຫຼືປະຈຳປີ.** ນັກພັດທະນາແລະນັກລົງທຶນແມ່ນໄດ້ຮັບໃບອະນຸຍາດແລ້ວ ແລະ ຕ້ອງໃຫ້ສິ່ງບົດລາຍງານປະຈຳເດືອນເຊັ່ນດຽວກັນກັບການແຈ້ງເສຍອາກອນ. ພວກເຂົາເຈົ້າຍັງຕ້ອງໃຫ້ມີ 'ການຢັ້ງຢືນ' ເປັນໄລຍະເພື່ອຮັບປະກັນວ່າຕົນໄດ້ປະຕິບັດຖືກຕາມຂໍ້ກຳນົດໃນໃບອະນຸຍາດ. ຜົນປະໂຫຍດດ້ານພາສີແລະອາກອນແມ່ນຂຶ້ນກັບວ່າບໍລິສັດໄດ້ຮັບ 'ການຢັ້ງຢືນ' ຫລືບໍ່. ເນື່ອງຈາກ SEZ ຖືກຄວບຄຸມໂດຍພາສີ, ກໍ່ຍັງບໍ່ຊັດເຈນວ່າເປັນຫຍັງແຕລະຫົວໜ່ວຍຈຳເປັນຕອງສົ່ງແຜນບັນຊີລາຍການນຳເຂົ້າລວມສຳລັບການອະນຸມັດປະຈຳປີ.

402. **ເຂດເສດຖະກິດພິເສດຂອງ ສປປ ລາວ ໄດ້ແກ້ໄຂບັນຫາຂໍ້ຈຳກັດດ້ານບັນຍາກາດການລົງທຶນທີ່ມີຢູ່ແລ້ວບໍ?** SEZs ທີ່ປະສົບຜົນສຳເລັດມີການຈັດຕຽມໄວ້ໃຫ້ກ່ຽວກັບພື້ນຖານໂຄງລ່າງສາທາລະນຸປະໂພກ ທີ່ມີຄຸນນະພາບແລະລະບຽບວິທີປະຕິບັດທາງດ້ານພາສີທີ່ໄດ້ປັບປຸງໃຫ້ມີປະສິດທິພາບສູງສຸດ. ຂັ້ນຕອນ ແລະ ຂໍ້ກຳນົດການໃຫ້ລາຍງານທີ່ດຳເນີນຢູ່ໃນປັດຈຸບັນແມ່ນບໍ່ສອດຄ່ອງກັບພາກປະຕິບັດທີ່ນຳໜ້າຂອງສາກົນ. ນອກຈາກນັ້ນ, ສປປ ລາວ ຍັງຜະເຊີນກັບການຂາດແຄນແຮງງານທີ່ມີສີມື.

403. **ເຂດເສດຖະກິດພິເສດຂອງ ສປປ ລາວ ຄົງຈະໄດ້ຮັບຜົນປະໂຫຍດຈາກການສຶກສາປຽບທຽບໃສ່ກັບວິທີປະຕິບັດທີ່ດີດ້ານອີງການຈັດຕັ້ງຂອງ SEZ ທີ່ນຳໜ້າຂອງໂລກແລ້ວນຳເອົາມາປັບປຸງຕົນເອງ.** ໃນປັດຈຸບັນ SEZ ສ່ວນໃຫຍ່ແມ່ນບໍ່ໄດ້ເອົາແບບຢ່າງປະເພນີການປະຕິບັດທີ່ນຳໜ້າຂອງສາກົນ. ຍັງຂາດຄວາມກະຈ່າງແຈ້ງລະຫວ່າງພາລະບົດບາດໃນການຄວບຄຸມຄຸ້ມຄອງ ແລະ ການພັດທະນາ ແລະ ການຄຸ້ມຄອງບໍລິຫານການປະຕິບັດງານ. ມີຄວາມຈຳເປັນທີ່ຈະຕ້ອງໄດ້ອອກລະບຽບກົດໝາຍວ່າດ້ວຍ SEZ ໃໝ່: ເພື່ອຮັບປະກັນການແບ່ງຄວາມຮັບຜິດຊອບຢ່າງຈະແຈ້ງລະຫວ່າງຜູ້ຄວບຄຸມ ແລະ ຜູ້ພັດທະນາ/ຜູ້ດຳເນີນການ; ສ້າງຕັ້ງອົງກອນຄຸ້ມຄອງບໍລິຫານອັນດຽວ, ເປັນເຈົ້າຕົນເອງ ໂດຍໃຫ້ມີອຳນາດໜ້າທີ່ເໜືອ ພາກສ່ວນອື່ນໆຈາກຂະແໜງການຂອງລັດຖະບານ (OGA) ເກືອບທັງໝົດຢູ່ໃນເຂດ; ເພື່ອຮັບປະກັນໃຫ້ຝ່າຍຄວບຄຸມຄຸ້ມຄອງມີອຳນາດຊອບເຊື່ອກວ້າງຂວາງ ແລະ ອຳນາດໃນການສັ່ງການເພື່ອປະຕິບັດໜ້າທີ່ໆໄດ້ຮັບມອບໝາຍ. ສິ່ງດັ່ງກ່າວຈະຊ່ວຍໃນການນຳໃຊ້ເຂດເສດຖະກິດພິເສດເພື່ອສະແດງໃຫ້ເຫັນຜົນປະໂຫຍດຂອງການປັບປຸງຢ່າງວ່ອງໄວຕໍ່ສະພາບແວດລ້ອມການລົງທຶນ ແລະ ສິ່ງທ້າທາຍດ້ານພື້ນຖານໂຄງລ່າງ, ເຊິ່ງຈະເປັນການສະໜັບສະໜູນການປະຕິຮູບໃນທົ່ວປະເທດ.

404. **ສປປ ລາວຄົງຈະໄດ້ຮັບຜົນປະໂຫຍດຈາກການປະເມີນລະອຽດກ່ຽວກັບຜົນກະທົບຂອງນະໂຍບາຍ ສົ່ງເສີມທີ່ມີຢູ່ຕໍ່ກັບການສ້າງວຽກເຮັດງານທຳ ແລະ ການສ້າງໃຫ້ມີຄວາມຫຼາກຫຼາຍດ້ານການສົ່ງອອກ.** ການສ້າງຕັ້ງ SEZ ຮຽກຮ້ອງໃຫ້ມີການປະກອບຊັບພະຍາກອນທີ່ມີຢູ່ຢ່າງຈຳກັດ ຈາກພາກລັດ ແລະທັງເປັນຄວາມພະຍາຍາມເພື່ອຫລີກລ້ຽງຈາກສະພາບແວດລ້ອມປັດຈຸບັນທີ່ຍັງບໍ່ເອື້ອອຳນວຍເທົ່າທີ່ຄວນຕໍ່ທຸ ລະກິດ ດ້ວຍວິທີການສະເໜີໃຫ້ນະໂຍບາຍສົ່ງເສີມໃຫ້ແກ່ນັກລົງທຶນຕ່າງປະເທດ. ລັດຖະບານມີນະໂຍ ບາຍສົ່ງເສີມດ້ານອາກອນຢ່າງເຫລືອເຟືອ (ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ 2017). FDI ເກືອບທັງໝົດ ໄດ້ຮັບຜົນປະໂຫຍດຈາກການຍົກເວັ້ນພາສີນຳເຂົ້າສຳລັບສິນຄ້າທຶນ(ພາຫະນະການຜະລິດ), ວັດຖຸປະກອບນຳເຂົ້າແລະວັດຖຸດິບ ແລະ ການຫລຸດຜ່ອນອາກອນ ທີ່ມີໄລຍະເວລາຂຶ້ນກັບປະເພດຂອງກິດຈະການ, ຂະໜາດ ແລະ ສະຖານທີ່ຕັ້ງ. ສປປ ລາວ ໄດ້ປະສົບຜົນສຳເລັດໃນການດຶງດູດການລົງທຶນຈາກຕ່າງປະເທດຈຳນວນໜຶ່ງເຂົ້າໃນອຸດສາຫະກຳປຸງແຕ່ງທີ່ແນໃສ່ການສົ່ງອອກ; ແນວໃດກໍ່ຕາມ, ການສ້າງວຽກເຮັດງານທຳຍັງມີໜ້ອຍຫຼາຍ ແລະ ມີການເຊື່ອມໂຍງໜ້ອຍເຂົ້າກັບສ່ວນທີ່ເຫຼືອໃນເສດຖະກິດ. ການປະເມີນລະອຽດວ່າ SEZs ປະກອບສ່ວນເຂົ້າໃນເປົ້າໝາຍການພັດທະນາຂອງ ສປປ ລາວ ແນວໃດ ຈະຊ່ວຍອຳນວຍຄວາມສະດວກໃຫ້ແກ່ການຈັດຕັ້ງປະຕິບັດບັນດານະໂຍບາຍ, ລະບຽບການ ແລະ ການປະຕິບັດທາງດ້ານບໍລິຫານໃຫ້ມີປະສິດທິຜົນຫຼາຍຂຶ້ນ.

### ເຄື່ອງນຸ່ງຫົ່ມ/ເຄື່ອງຕັດຫຍິບ

405. **ເຄື່ອງນຸ່ງຫົ່ມ/ເຄື່ອງຕັດຫຍິບ ໂຮງງານຕັດຫຍິບແຫ່ງທຳອິດມີມາແຕ່ປີ 1984.** ຂະແໜງດັ່ງກ່າວຂ້ອນຂ້າງຂະຫຍາຍຕົວໄວ ຄືຮອດ ປີ 2014 ແມ່ນມີຫລາຍກວ່າ 100 ໂຮງງານ ໂດຍມີ 40 ວິສາຫະກິດແມ່ນສຸມໃສ່ການຜະລິດສົ່ງອອກໃຫ້ແກ່ຕະຫຼາດສະຫະພາບເອີຣົບ (ອີຢູ), ຍີ່ປຸ່ນ ແລະ ສະຫະລັດອາເມຣິກາ ເຊິ່ງເຂົາເຈົ້າໄດ້ຮັບຜົນປະໂຫຍດຈາກສິດທິພິເສດທາງດ້ານການຄ້າໃນຖານະທີ່ເສດຖະກິດລາວຍັງບໍ່ທັນພັດທະນາ. ການລົງທຶນທີ່ສຳຄັນໃນຂະແໜງຕັດຫຍິບຂອງ ສປປ ລາວ ແມ່ນມີໜ້ອຍກວ່າການລົງທຶນໃນຂະແໜງດຽວກັນໃນບັນດາປະເທດເພື່ອນບ້ານ ເຊັ່ນ ກຳປູເຈຍ ແລະ ຫວຽດນາມ. ເມື່ອສຳຫຼວດເບິ່ງແລ້ວ, ບັນດາທຸລະກິດໄດ້ລະບຸວ່າມີສິ່ງທ້າທາຍຫຼາຍຢ່າງລວມມີການຂາດແຄນແຮງງານທີ່ມີ ແລະ ບໍ່ມີຄວາມຊຳນິຊຳນານງານ, ຜະລິດຕະພາບແຮງງານຕໍ່າ, ຄ່າຂົນສົ່ງສູງ, ພື້ນຖານໂຄງລ່າງຍັງບໍ່ດີພໍ ເຊິ່ງເຮັດໃຫ້ເກີດຄວາມຊັກຊ້າໃນລະດູຝົນ ແລະລະບອບສ່ວຍສາອາກອນທີ່ບໍ່ເອື້ອອຳນວຍສຳລັບຜູ້ຮັບເໝົາຕໍ່ຊ່ວງ.

406. **ໂຮງງານຕັດຫຍິບມີຄົນງານ 26.000 ຄົນ ແລະ ສ່ວນໃຫຍ່ແມ່ນຕັ້ງຢູ່ນອກເຂດ SEZ ໃນນະຄອນຫຼວງວຽງຈັນ ແລະ ເຂດອ້ອມຂ້າງ.** ເກືອບ 80 ໂຮງງານແມ່ນຕ່າງປະເທດເປັນເຈົ້າຂອງ ແລະ ຜະລິດເຄື່ອງນຸ່ງເພື່ອຕະຫຼາດສົ່ງອອກເທົ່ານັ້ນ; ຍັງເຫຼືອອີກ 20 ໂຮງງານແມ່ນຜະລິດຊິ້ນສ່ວນເສື້ອຜ້າ (ແທນທີ່ຈະເປັນເຄື່ອງຕັດຫຍິບຄົບຊຸດ). ໂຮງງານຫຍິບເຄື່ອງ ແບບ CMT ໄດ້ນຳເຂົ້າແຜນແພ ແລະ ຜ້າແພມາເຮັດເປັນເຄື່ອງຕັດຫຍິບ (ໝາຍເຖິງ ຮັບແພມາຕັດຕາມແບບ ແລະ ຕາມລາຍລະອຽດຕ່າງໆແລ້ວຫຍິບເຂົ້າເປັນໂຕເຄື່ອງນຸ່ງ ແລະ ຕົກແຕ່ງໃຫ້ສຳເລັດຮຽບຮ້ອຍ). ໂຮງງານ 7 ແຫ່ງ ເປັນຂອງນັກລົງທຶນລາວ; ນັກລົງທຶນຕ່າງປະເທດທີ່ສຳຄັນແມ່ນມາຈາກຍີ່ປຸ່ນແລະໄທ. 50 ວິສາຫະກິດແມ່ນຜະລິດສະເພາະເພື່ອສົ່ງອອກ ແລະ 28 ວິສາຫະກິດແມ່ນຂາຍອອກສູ່ທັງຕະຫຼາດທັງພາຍໃນ ແລະ ຕ່າງປະເທດ. ຕະຫຼາດສົ່ງອອກທີ່ສຳຄັນລວມມີ EU[77] , ເຊິ່ງ ສປປ ລາວສາມາດສົ່ງສິນຄ້າເຂົ້າໄປໄດ້ ໂດຍບໍ່ເສຍພາສີ ຍ້ອນໄດ້ຮັບສິດທິພິເສດທາງດ້ານການຄ້າ ແລະ ຍີ່ປຸ່ນ. ພາຍໃນສະຫະພາບເອີຣົບ, ເຢຍລະມັນແມ່ນຕະຫຼາດໃຫຍ່ສຳລັບຊຸດຜູ້ຊາຍທີ່ບໍ່ແມ່ນເຄື່ອງຖັກ (ຜະລິດຕະພັນເຄື່ອງນຸ່ງທີ່ໃຫຍ່ທີ່ສຸດ), ຕິດຕາມມາໂດຍອັງກິດ. ເກືອບທັງໝົດບໍລິສັດເຫຼົ່ານີ້ລົງທຶນໃນຊຸມປີ 1990 ແລະຕົ້ນຊຸມປີ 2000 ແລະຕັ້ງຢູ່ນອກເຂດເສດຖະກິດພິເສດ. ນັບແຕ່ປີ 2015 ເປັນຕົ້ນມາ, ມີນັກລົງທຶນຍີ່ປຸ່ນຈຳນວນໜຶ່ງແມ່ນໄດ້ຕັ້ງໂຮງງານຢູ່ເຂດເສດຖະກິດພິເສດ ແລະ ໄດ້ເລີ່ມຜະລິດເສື້ອຜ້າປ້ອງກັນຄວາມປອດໄພ, ເກີບບູທ(ຄໍສູງ)ເພື່ອສົ່ງອອກ. ໃນຂະນະທີ່ມູນຄ່າການສົ່ງອອກເວົ້າລວມຍັງຢູ່ຄົງທີ່ໃນທົດສະວັດທີ່ຜ່ານມາ, ສ່ວນແບ່ງຂອງເຄື່ອງຕັດຫຍິບໃນການສົ່ງອອກທັງໝົດແມ່ນໄດ້ຫຼຸດລົງເປັນ 6 ສ່ວນຮ້ອຍ.

407. **ການຂາດແຄນແຮງງານທີ່ມີສີມື.** ເຈົ້າຂອງໂຮງງານແມ່ນສະມາຊິກ ຂອງສະມາຄົມອຸດສາຫະກຳຕັດຫຍິບລາວ (ALGI) ທີ່ຂຶ້ນກັບສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ. ALGI ໄດ້ລະບຸເຖິງການຂາດແຄນຄົນງານ ທີ່ມີທັກສະຕໍ່າສຸດ ວ່າເປັນຂໍ້ຈຳກັດທີ່ສຳຄັນ ຕໍ່ການຂະຫຍາຍກິດຈະການ. ໃນປີ 2015, ການສຳຫຼວດ ໂດຍ MOIC ໄດ້ລະບຸວ່າມີ 30.000 ຄົນ ທີ່ເຄີຍເຮັດວຽກຢູ່ໂຮງງານຕັດຫຍິບມາກ່ອນ ແລະ ໄດ້ອອກຈາກວຽກໄປ ຫຼື ຖືກຕັດທອນຈຳນວນພົນ. ALGI ສັງເກດເຫັນວ່າອະດີດພະນັກງານພາລະກອນຈຳນວນຫຼາຍໄດ້ຖືກຕັດທອນອອກ ຍ້ອນວ່າພວກເຂົາບໍ່ມີພື້ນຖານການສຶກສາຕໍ່າສຸດພໍ ທີ່ຈະສາມາດຝຶກອົບຮົມໄດ້ໃນວຽກງານຕົວຈິງ. ຢ່າງໃດກໍ່ຕາມ, ມີຫຼັກຖານບາງຢ່າງທີ່ວິສາຫະກິດໄດ້ທົດແທນແຮງງານທີ່ໄດ້ຄ່າຈ້າງແບບຖາວອນ ດ້ວຍແຮງງານຊົ່ວຄາວ ຫຼືເຮັດວຽກເປັນຊິ້ນ ເພື່ອໃຫ້ຫຼຸດຜ່ອນຕົ້ນທຶນ. ນອກຈາກນັ້ນ, ການຮັກສາລະດັບການຈ້າງງານຍັງຄົງເປັນສິ່ງທ້າທາຍ ເນື່ອງຈາກຊ່າງຫຍິບເຄື່ອງທີ່ມີປະສົບການສາມາດໄປເຮັດວຽກທີ່ມີຄ່າຈ້າງສູງກວ່າຢູ່ໄທ ເຊິ່ງເປັນປະເທດໃກ້ຄຽງ; ກ່ອນການລະບາດຂອງພະຍາດໂຄວິດ-19, ມີພົນລະເມືອງລາວປະມານ 0,25 ລ້ານຄົນໄດ້ໄປເຮັດວຽກຢູ່ປະເທດໄທ ເຊິ່ງຄ່າຈ້າງຂັ້ນຕໍ່າແມ່ນຫຼາຍກວ່າຄ່າແຮງງານປົກກະຕິໃນ ສປປ ລາວ 2 ເທົ່າ.

77. ຂໍ້ມູນຂອງ EU ກວມເອົາໄລຍະ 2016-19 ເຊິ່ງລວມມີທັງສະຫະລາຊະອານາຈັກອັງກິດ UK. UK ໄດ້ອອກຈາກ EU ໃນວັນທີ 31 ມັງກອນ, 2020.

408. **ຜະລິດຕະພາບຕ່ຳ ແລະສະພາບແວດລ້ອມທີ່ຍັງບໍ່ເອື້ອອຳນວຍແກ່ການເຮັດທຸລະກິດໄດ້ສົ່ງຜົນທາງລົບຕໍ່ຄວາມສາມາດໃນການແຂ່ງຂັນ.** ກ່ອນການຫລຸດຄ່າເງິນເມື່ອບໍ່ດົນມານີ້ ພາຍຫຼັງສະພາບການທີ່ເກີດມີໜີ້ສິນຢ່າງຫລວງຫລາຍ, ການລົງທຶນດ້ານພື້ນຖານໂຄງລ່າງຂະໜາດໃຫຍ່ ແລະ ການສົ່ງອອກແຮທາດໄດ້ພາໃຫ້ເກີດປາກົດການ "ພະຍາດດັຈ ຫລື ໂຮນລັງ" (ຄື ເມື່ອປະເທດມີການເຕີບໂຕທາງເສດຖະກິດຈາກການຂຸດຄົ້ນຊັບພະຍາກອນທຳມະຊາດ, ແຕ່ຊ້ຳພັດບໍ່ໄດ້ເປັນຜົນດີໃຫ້ມີການຂະຫຍາຍຕົວຂອງຂະແໜງການອື່ນ), ເຊິ່ງເຮັດໃຫ້ລາຄາການນຳເຂົ້າເພີ່ມຂຶ້ນ. ສະພາບແວດລ້ອມທີ່ທ້າທາຍການເອື້ອອຳ ນວຍແກ່ການດຳເນີນທຸລະກິດ, ຄ່າຂົນສົ່ງແລະຄ່າໂລຊິດສະຕິກສູງ ແລະການບໍ່ມີນະໂຍບາຍສົ່ງເສີມທາງດ້ານອາກອນຫຼືພາສີສຳລັບຜູ້ຮັບເໝົາຕໍ່ຊ່ວງ (ຜູ້ສົ່ງອອກໂດຍທາງອ້ອມ) ເຮັດໃຫ້ຄວາມສາມາດແຂ່ງຂັນຫຼຸດລົງ.

## ຜະລິດຕະພັນໄມ້

409. **ສ.ປ.ປ.ລາວ ມີທ່າແຮງປຽບທຽບໃນການຜະລິດໄມ້; ຢ່າງໃດກໍ່ຕາມ, ການຂຸດຄົ້ນຊັບພະຍາກອນ ທຳມະຊາດນີ້ຕ້ອງໃຫ້ມີຄວາມຍືນຍົງ.** ສະພາບດິນຟ້າອາກາດ ແລະ ພູມສັນຖານເຂດຮ້ອນຂອງ ສປປ ລາວ ໄດ້ສົ່ງຜົນໃຫ້ເກືອບທົ່ວປະເທດມີປ່າທຳມະຊາດທີ່ມີຕົ້ນໄມ້ຫຼາຍຊະນິດ, ລວມທັງໄມ້ເນື້ອແຂງທີ່ມີຄຸນຄ່າສູງ. ຈົນຮອດຫວ່າງບໍ່ດົນມານີ້, ເກືອບວ່າການຜະລິດໄມ້ທຳມະຊາດທັງຫມົດທີ່ບໍ່ໄດ້ປຸງແຕ່ງໄດ້ຖືກສົ່ງອອກໄປຕະຫຼາດໃກ້ຄຽງ. ໃນປີ 2016, ລັດຖະບານ ສປປ ລາວ (ຄຳສັ່ງຂອງນາຍົກລັດຖະມົນຕີ ສະບັບເລກທີ 15) ໄດ້ເລີ່ມຈຳກັດການສະໜອງໄມ້ໃຫ້ແກ່ອຸດສາຫະກຳປຸງແຕ່ງ ແລະ ໄດ້ມີການເກືອດຫ້າມການສົ່ງອອກຜະລິດຕະພັນໄມ້ເຄິ່ງສຳເລັດຮູບ ແລະ ຜະລິດຕະພັນໄມ້ທີ່ຍັງບໍ່ໄດ້ປຸງແຕ່ງສຳເລັດຮູບເພື່ອສະກັດກັ້ນການລັກລອບຕັດໄມ້ທີ່ຜິດກົດໝາຍ. ສປປ ລາວ ຍັງໄດ້ບັງຄັບໃຊ້ການຫ້າມການຕັດໄມ້ທຳມະຊາດ ເພື່ອໃຫ້ປ່າໄມ້ທຳມະຊາດຟື້ນຕົວຄືນ ຈາກ ການລັກລອບຕັດໄມ້ເກີນຂອບເຂດທີ່ບໍ່ຍືນຍົງ ໃນເມື່ອກ່ອນ. ປີ 2018, ກະຊວງ MOIC ໄດ້ອອກບັນຊີລາຍການຜະລິດຕະພັນໄມ້ທີ່ສາມາດສົ່ງອອກໄດ້ສະບັບປັບປຸງ ເພື່ອແນໃສ່ຊຸກຍູ້ໃຫ້ຜະລິດຕະພັນມີມູນຄ່າເພີ່ມສູງຂຶ້ນ. ເພື່ອຊຸກຍູ້ການເຕີບໂຕແບບຍືນຍົງ, ບັນຊີລາຍການຍັງລວມມີບັນດາສິນຄ້າເຄິ່ງສຳເລັດຮູບທີ່ມີຕົ້ນກຳເນີດຈາກໄມ້ສວນປູກແບບຍືນຍົງ.

410. **ພື້ນທີ່ສຳລັບການປູກໄມ້ແບບຍືນຍົງຍັງມີຂະໜາດນ້ອຍ; ການຂະຫຍາຍຕົວໃນອະນາຄົດແມ່ນອີງ ໃສ່ການໃຫ້ສຳປະທານທີ່ດິນໃຫມ່ແກ່ພາກເອກະຊົນ.** ປັດຈຸບັນທີ່ດິນທີ່ມີການຖາກຖາງເພື່ອພັດທະນາພື້ນ ຖານໂຄງລ່າງແມ່ນແຫລ່ງສະໜອງໄມ້ດິບ; ແນວໃດກໍ່ຕາມ, ນີ້ບໍ່ແມ່ນແຫຼ່ງທີ່ເຊື່ອຖືໄດ້ ຫຼື ຍືນຍົງ. ການພັດທະນາພື້ນຖານໂຄງລ່າງຂະໜາດໃຫຍ່, ລວມທັງການສ້າງເຂື່ອນໄຟຟ້ານ້ຳຕົກ ແລະ ສວນຢາງພາລາ ສົ່ງຜົນໃຫ້ເກີດການຕັດໄມ້ທຳລາຍປ່າຂະໜາດໃຫຍ່ໂດຍມີການສົ່ງອອກໄມ້ເພີ່ມຂຶ້ນ ຄຽງຄູ່ກັບ FDI. ນີ້ບໍ່ແມ່ນແຫຼ່ງໄມ້ທີ່ມີຄວາມຍືນຍົງ. ອຸດສາຫະກຳໄມ້ແປຮູບຈະຖືກຈຳກັດຈົນກວ່າຈະມີໄມ້ເພີ່ມຕື່ມຈາກສວນປູກທີ່ຍືນຍົງສະໜອງໃຫ້ຢ່າງປົກກະຕິ. ການຂາດແຄນໄມ້ດິບ ແລະການຫ້າມສົ່ງອອກເປັນການຈຳກັດການຂະຫຍາຍຕົວ ຂອງຂະແໜງການນີ້ໃນໄລຍະສັ້ນແລະກາງ. ໃນໄລຍະຍາວ, ການເຕີບໂຕຈະຂຶ້ນກັບການມີໄມ້ຈາກສວນປູກແບບຍືນຍົງທີ່ເພີ່ມຂຶ້ນ.

411. **ຄວາມສຳຄັນຂອງການມີຂໍ້ມູນທີ່ຖືກຕ້ອງກວ່ານີ້ ແລະການຈົດບັນທຶກເກັບກຳ ກ່ຽວກັບແຫລ່ງສະໜອງໄມ້ຈາກສວນປູກ, ການນຳໃຊ້ໄມ້ ແລະ ການສົ່ງອອກ, ການປັບປຸງວິທີປະຕິບັດ ແລະ ຄວາມຮູ້ທາງດ້ານການປູກບຳລຸງປ່າ ແລະການບັງຄັບໃຊ້ກົດໝາຍທີ່ມີຢູ່ແລ້ວໃນການຄຸ້ມຄອງການສົ່ງອອກໄມ້.** ການສົ່ງອອກໄມ້ຜິດກົດໝາຍຍັງຄົງເປັນຄວາມກັງວົນ. ກະຊວງ MOIC ໄດ້ລາຍງານການສົ່ງອອກໄມ້ແລະຜະລິດຕະພັນໄມ້ໄປຈີນໃນປີ 2014-2015 ມີມູນຄ່າ 28,5 ລ້ານໂດລາສະຫະລັດ, ໃນຂະນະທີ່ຈີນ (ລາຍງານຕໍ່ UN COMTRADE) ນຳເຂົ້າ 498,6 ລ້ານໂດລາສະຫະລັດ ຈາກ ສປປ ລາວ.[78] ສຳລັບການສົ່ງອອກໄປຫວຽດນາມ ກໍ່ມີຄວາມຜິດໂຕນຄ້າຍຄືກັນດ້ານຕົວເລກການສົ່ງອອກໄປຫວຽດນາມເຊິ່ງ MOIC ເກັບບັນທຶກການສົ່ງອອກໄດ້ພຽງ 69,8 ລ້ານໂດລາສະຫະລັດ ໃນຂະນະທີ່ຫວຽດນາມຈົດບັນທຶກການນຳເຂົ້າໄດ້ 404,4 ລ້ານໂດລາ.[79] ຂະໜາດຂອງຄວາມແຕກຕ່າງອັນຄຽງລະຫວ່າງການສົ່ງອອກແລະການນຳເຂົ້າຈາກປະເທດເພື່ອນບ້ານທີ່ຈົດບັນທຶກໄວ້ນີ້ຊີ້ໃຫ້ເຫັນເຖິງວ່າການຕັດໄມ້ທີ່ຜິດກົດຫມາຍຍັງມີຢູ່ຢ່າງແຜຫລາຍ. ກົດໝາຍປັດຈຸບັນ ແມ່ນແກ້ໄຂບັນຫາການປົກປັກຮັກສາປ່າໄມ້, ແນວໃດກໍ່ຕາມ, ການຈັດຕັ້ງປະຕິບັດທີ່ມີຜົນ ແລະ ສອດຄອງກັນຍັງຄົງເປັນສິ່ງທ້າທາຍ. ມາຮອດປັດຈຸບັນ, ໄດ້ມີການເປີດເຜີຍການລະເມີດຂະໜາດນ້ອຍຂອງບຸກຄົນເທົ່ານັ້ນ; ເຖິງຢ່າງໃດກໍດີ, ການສົ່ງອອກທີ່ມີປະລິມານຍອມຕ້ອງການເຄື່ອງອຸປະກອນທີ່ໜັກ ເຊິ່ງມີພຽງແຕ່ບໍລິສັດໃຫຍ່ເທົ່ານັ້ນທີ່ມີໄດ້. ສປປ ລາວ ມີຂໍ້ມູນຂ່າວສານທີ່ຖືກຕ້ອງໃນລະດັບຈຳກັດກ່ຽວກັບຂອບເຂດ ແລະ ລັກສະນະຂອງແຫຼ່ງສະໜອງໄມ້ຈາກສວນປູກ; ນີ້ແມ່ນຂໍ້ຈຳກັດໃນການພັດທະນາຂອງຂະແໜງການດັ່ງກ່າວ.[80] ການຊ່ວຍເຫຼືອຂອງອົດສະຕຣາລີ ໄດ້ດຳເນີນການຂຶ້ນບັນຊີໄມ້ສັກຂອງສວນປູກໃຫ້ກັບແຂວງຫຼວງພະບາງ ເຊິ່ງຄາດຄະເນບໍລິມາດທີ່ຄ້າຂາຍໄດ້ແມ່ນ 570.000 ແມັດກ້ອນ; ແນວໃດກໍ່ຕາມ, ຕົ້ນໄມ້ສວນໃຫຍ່ມີຂະໜາດນ້ອຍ ແລະ ມີຄຸນນະພາບບໍ່ດີ, ຕັ້ງຢູ່ໃນສວນປູກຂະໜາດນ້ອຍທີ່ມາຈາກແນວພັນທີ່ບໍ່ຮູ້ຊື່ ແລະ ຖືກຄຸ້ມຄອງໂດຍເຈົ້າຂອງຫຼາຍຄົນທີ່ມີປະສົບການດ້ານການປູກບຳລຸງປ່າທີ່ຍັງຈຳກັດ.

---

78. Bannister, G.J., M. Ghazanchyan, ແລະ T.P. Bikoi (2017), 'ສປປ ລາວ: ການປະເມີນຄຸນນະພາບສະຖິຕິການຄ້າ, ບົດສັງລວມຂໍ້ມູນເບື້ອງຕົ້ນ ຂອງ IMF, ເລກທີ 17/251 https://www.imf.org/en/Publications/WP/Issues/2017/11/16/LAO-P-D-R-45367
79. ໃນປີ 2015 ກອງທຶນສັດປ່າໂລກໄດ້ລາຍງານວ່າມູນຄ່າລວມຂອງຜະລິດຕະພັນໄມ້ທີ່ຜະລິດຢູ່ລາວແມ່ນສູງກວ່າມູນຄ່າສົ່ງອອກທັງໝົດທີ່ກົມພາສີ ສປປ ລາວໄດ້ມີການບັນທຶກເອົາໄວ້ຫລາຍເທົ່າຕົວ (Smirnov, 2015).
80. Boer Ken, (2019), ເລັ່ງໃຫ້ອຸດສາຫະກຳປຸງແຕ່ງໄມ້ມີຄວາມບຸກໜ້າບົນຕົວເພີ່ມຂຶ້ນ ໃນລາວ ແລະ ອົດສະຕຣາລີ: ການສຳຫລວດຊັບພະຍາກອນໄມ້ສັກຢູ່ແຂວງຫຼວງພະບາງ, ອົງການຊ່ວຍເຫລືອຂອງອົດສະຕຣາລີ.

412. **ສ້າງລະບົບສະໜັບສະໜູນທີ່ໝັ້ນຄົງໃນການຄຸ້ມຄອງປ່າໄມ້ແບບຍືນຍົງໃນໄລຍະຍາວ.** ຮັບປະກັນການຢັ້ງຢືນການສືບສາວຫາແຫຼ່ງທີ່ມາຂອງການຜະລິດ, ການປຸງແຕ່ງ ແລະ ການຈັດຈຳໜ່າຍໄມ້ຢ່າງມີປະສິດທິຜົນ ຮຽກຮ້ອງໃຫ້ມີນະໂຍບາຍແຫ່ງຊາດໄລຍະຍາວໃນການຄຸ້ມຄອງປ່າໄມ້, ແຜນການຄຸ້ມຄອງການປູກປ່າທີ່ໂປ່ງໃສ ແລະ ການຕັດໄມ້, ຄຳແນະນຳການຕັດ(ຕັດແຕ່ງ), ການປູກ, ພື້ນທີ່ປູກ, ຊະນິດຕົ້ນໄມ້, ລະບຽບການຄຸ້ມຄອງປົກປັກຮັກສາປ່າ ແລະ ການຝຶກອົບຮົມວິຊາການກ່ຽວກັບການປຸງແຕ່ງໄມ້.

**ຜະລິດຕະພັນອາຫານ**

413. **ການສົ່ງອອກສິນຄ້າກະສິກຳເພີ່ມຂຶ້ນສອງເທົ່າໃນທົດສະວັດທີ່ຜ່ານມາກວມເອົາ 10 ສ່ວນຮ້ອຍຂອງລວມຍອດການສົ່ງອອກ.** ການສົ່ງອອກສິນຄ້າກະສິກຳສ່ວນໃຫຍ່ແມ່ນໝາກໄມ້ແລະຜັກ ເຊິ່ງການສົ່ງອອກຜະລິດຕະພັນອາຫານທີ່ມີມູນຄ່າເພີ່ມແມ່ນມີຈຳກັດ. ໃນ ສປປ ລາວ ມີວິສາຫະກິດປຸງແຕ່ງອາຫານຂະໜາດໃຫຍ່ໜ້ອຍດຽວ. ສາມວິສາຫະກິດປຸງແຕ່ງອາຫານ ທີ່ໃຫຍ່ທີ່ສຸດ ລວມມີ ເບຍລາວ ເຊິ່ງຈ້າງຄົນງານ 700 ກວ່າຄົນ ແລະ ກາເຟດາວ ແລະ ໝາກໄມ້ອົບແຫ້ງດາວ (DAO Food) ແຕ່ລະແຫ່ງ ຈ້າງຄົນງານ ປະມານ 200 ຄົນ. ວິສາຫະກິດປຸງແຕ່ງອາຫານສ່ວນໃຫຍ່ແມ່ນຜະລິດສຳລັບຕະຫຼາດພາຍໃນ.

414. **ການຜະລິດພືດເປັນສິນຄ້າທີ່ເພີ່ມຂຶ້ນ ເຮັດໄດ້ໃຫ້ຄວາມທຸກຍາກຫຼຸດຜ່ອນລົງ.** ນັບຕັ້ງແຕ່ ມີບົດ DTIS ທີ່ຜ່ານມາ (2012) ຊາວນາຂະໜາດນ້ອຍຫຼາຍຄົນໄດ້ຍ້າຍຈາກການປູກເຂົ້າກຸ້ມຕົນເອງໄປສູ່ການປູກພືດເປັນສິນຄ້າເພື່ອຂາຍໃນຕະຫຼາດ. ໃນຈຳນວນຊາວນາຂະໜາດນ້ອຍເຫຼົ່ານີ້ຫຼາຍຄົນໄດ້ເຮັດຮ່ວມກັບພໍ່ຄ້າຊາວຂາຍຈາກໄທ ແລະ ຫວຽດນາມ ແລະ ຜະລິດເພື່ອສົ່ງອອກ. ການຄ້າຂາຍພືດເປັນສິນຄ້າລະຫວ່າງຊາຍແດນທີ່ເພີ່ມຂຶ້ນໃນໄລຍະນີ້ແມ່ນໄປຄຽງຄູ່ກັບການຫຼຸດຜ່ອນລະດັບຄວາມທຸກຍາກຢູ່ບັນດາແຂວງຊາຍແດນພາກເໜືອແລະພາກໃຕ້. (ສະພາບຂໍ້ມູນລວມກ່ຽວກັບຄວາມທຸກຍາກໃນ ສປປ ລາວ, 2020).

**ເອກະສານຊ້ອນທ້າຍ 1 ຄຳແນະນຳ ຂອງໂຄງການສຳລັບສະມາຊິກ ຂອງຄະນະຊີ້ນຳແຜນງານຈັດຕັ້ງປະຕິບັດໂຄງ ການ**

ສະມາຊິກຂອງ PEC (ໄດ້ແກ່, ຜູ້ໃຫ້ທຶນ ແລະ GOL) ມຸ່ງໝັ້ນທີ່ຈະຈັດລະບຽບວິທີປະຕິບັດແລະລະບົບເທົ່າທີ່ເປັນໄປໄດ້ຕາມຄຳແນະນຳ ຂອງ PEC. ບ່ອນໃດທີ່ລັດຖະບານເປັນຜູ້ຈັດຕັ້ງປະຕິບັດໂຄງການ, ການລາຍງານຕາມແຜນງານໂຄງການແບບປົກກະຕິມາດຕະຖານແມ່ນຍອມຮັບໄດ້; ໂຄງການທັງໝົດພາຍໃຕ້ T4D ຈະດຳເນີນງານຢູ່ໃນຂອບຜົນໄດ້ຮັບທີ່ຄາດຫວັງຂອງແຜນດຳເນີນງານຂອງຂະແໜງການຄ້າ ແລະພາກເອກະຊົນ; ບ່ອນທີ່ເປັນໄປໄດ້, ການຊ່ວຍເຫຼືອດ້ານການເງິນຈະຖືກສົ່ງມາຕາມຊ່ອງທາງກອງທຶນຜູ້ໃຫ້ທຶນສົມທົບຫລາຍຝ່າຍທີ່ມີຢູ່ ໂດຍມີຂັ້ນຕອນ ແລະ ຂໍ້ກຳນົດຕາມລະບຽບ.

ຄະນະທົບທວນການຈັດຕັ້ງປະຕິບັດໂຄງການ (PRC) ຂອງ TPSWG ເປັນຜູ້ຊີ້ນຳໂຄງການ ແລະ ທັງເຮັດໜ້າທີ່ເປັນຄະນະປະຕິບັດງານດ້ານວິຊາການເພື່ອປຶກສາຫາລື ແລະສະຫຼຸບບົດລາຍງານການຈັດຕັ້ງປະຕິບັດໂຄງການປະຈຳ 6 ເດືອນ ແລະແຜນວຽກລະອຽດສຳລັບໃຫ້ PEC. PRC ປະຊຸມຢ່າງໜ້ອຍສອງຄັ້ງຕໍ່ປີກ່ອນກອງປະຊຸມ PEC. ຜູ້ຕາງໜ້າຜູ້ໃຫ້ທຶນທັງໝົດ ໃນ PEC ໄດ້ຖືກເຊື້ອເຊີນໃຫ້ເຂົ້າຮ່ວມ ເປັນຜູ້ສັງເກດການ ໃນ PRC. ຫົວໜ້າກົມວິຊາການທີ່ກ່ຽວຂ້ອງເປັນປະທານກອງປະຊຸມ PRC ແລະ ມີຜູ້ຕາງໜ້າຜູ້ໃຫ້ທຶນ ເປັນປະທານຮ່ວມນຳ.

# ລາຍຊື່ເອກະສານອ້າງອີງ


ກອງເລຂາ ຂອງສູນອາຊຽນເພື່ອການພັດທະນາສະຫະກອນກະເສດ (ພະຈິກ 2019). ມອບຄວາມເປັນເຈົ້າໃຫ້ແກ່ສະຫະກອນກະເສດໃນດ້ານການຄຸ້ມຄອງຕ່ອງໂສ້ມູນຄ່າ ແລະ ການຍັ້ງຢືນສິ່ງບົ່ງຊີ້ທາງພູມສາດ GI, ບັນທຶກແນວຄວາມຄິດ, ການຢ້ຽມຢາມເພື່ອແລກປ່ຽນ ຂອງອາຊຽນ, ປາກເຊ, ສປປ ລາວ.

ADB, ໜ່ວຍງານການທ່ອງທ່ຽວຂອງອະນຸພາກພື້ນລຸ່ມແມ່ນ້ຳຂອງ (2015): ຍຸດທະສາດ ແລະ ແຜນດຳເນີນງານການທ່ອງທ່ຽວ ຂອງອະນຸພາກພື້ນລຸ່ມແມ່ນ້ຳຂອງ 2015-2020

ADB (2017): ບົດປະເມີນຂະແໜງການທ່ອງທ່ຽວ, ຍຸດທະສາດ ແລະ ແຜນດຳເນີນງານສຳລັບກຳປູເຈຍ, ສປປ ລາວ, ມຽນມາ ແລະ ຫວຽດນາມ (2016-2018)

ADB, ໜ່ວຍງານການທ່ອງທ່ຽວ ຂອງອະນຸພາກພື້ນລຸ່ມແມ່ນ້ຳຂອງ (2017), ຍຸດທະສາດການທ່ອງທ່ຽວຂອງອະນຸພາກພື້ນລຸ່ມແມ່ນ້ຳຂອງ 2016-2025

ທະນາຄານພັດທະນາອາຊີ (ທັນວາ 2018). ບົດປະເມີນ, ຍຸດທະສາດ ແລະ ແຜນດຳເນີນງານຂະແໜງ ການກະສິກຳ, ຊັບພະຍາກອນທຳມະຊາດ ແລະ ການພັດທະນາຊົນນະບົດ: ສາທາລະນະລັດ ປະຊາ ທິປະໄຕ ປະຊາຊົນ ລາວ, ມະນີລາ.

ADB (2019), ການວິເຄາະທຶນມະນຸດ ແລະ ການມີສ່ວນຮ່ວມຂອງກຳລັງແຮງງານ, ແຜນງານຂອງຂະ ແໜງສຶກສາ ເພື່ອການງານອາຊີບ (RRP LAO 50399)

ADB ຂໍ້ສະຫລຸບ (ມິຖຸນາ 2020): ຜົນກະທົບຂອງພະຍາດໂຄວິດ-19 ຕໍ່ວິສາຫະກິດທ່ອງທ່ຽວໃນສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ: ການປະເມີນເບື້ອງຕົ້ນ

ທະນາຄານພັດທະນາອາຊີ, (2021), ສປປ ລາວ: ການເລັ່ງການຫັນປ່ຽນໂຄງສ້າງເພື່ອການຂະຫຍາຍ ຕົວຢ່າງທົ່ວເຖິງ: ບົດສຶກສາຂອງປະເທດແບບພິນິດພິເຄາະ, ມະນີລາ, ຟີລິບປິນ.

ທະນາຄານພັດທະນາອາຊີ, (2021), ການປະເມີນຂະແໜງການຄ້າ ແລະການລົງທຶນ. ການສະໜັບສະໜູນນະໂຍບາຍເສດຖະກິດຂອງລາວ ເພື່ອເພີ່ມຜະລິດຕະພາບການຜະລິດທຸລະກິດ ແລະ ການຈ້າງງານ, TA9136.

Barney Keith ແລະ Kanya Souksakoun, (2021), 'ການຮັດກຸມການປ່ອຍສິນເຊື່ອ: ການກູ້ເງິນຈາກຈີນເພື່ອການສ້າງພື້ນຖານໂຄງລ່າງ ແລະ ໜີ້ສິນສາທາລະນະຂອງລາວ, ບັນດາບົດສຶກສານະໂຍ ບາຍ ຂອງອາຊີປາຊີຟິກ. 2021;8: 94-113. https://doi.org/10.1002/app5.318

ການຈັດລະດັບຍີ່ຫໍ້ ຂອງປະເທດໂດຍອີງການທີ່ປຶກສາ Bloom (https://www.bloom-consulting.com/en/country-brand-ranking)

Boulom, S., ແລະ ຄະນະຊ່ຽວຊານ (2020). ບັນດາປັດໄຈທີ່ກ່ຽວຂ້ອງກັບການຂາດສານອາຫານຂອງເດັກນ້ອຍໃນຊຸມຊົນຊົນເຜົ່າສ່ວນໜ້ອຍໃນເຂດພູດອຍໃນ ສປປ ລາວ, ການເຄື່ອນໄຫວດ້ານສຸຂະພາບໂລກ (ທາງອອນລາຍ), 13:sup2, 1785736, DOI: 10.1080/16549716.2020.1785736.

CABI ອາຊີຕາເວັນອອກສຽງໃຕ້ ແລະ ຕາເວັນອອກ (2008). ບົດລາຍງານສຸດທ້າຍ: CDF ກ່ຽວກັບການຄຸ້ມຄອງສັດຕູພືດແບບຍືນຍົງ ສຳລັບຊາວສວນກາເຟຂະໜາດນ້ອຍໃນລາວ ແລະ ຫວຽດນາມ, ສິງກະໂປ, ມາເລເຊຍ.

CBI ກະຊວງການຕ່າງປະເທດເນເທີແລນ/ໂຮນລັງ (ເດືອນມິຖຸນາ 2018): ການວິເຄາະລະບົບຕ່ອງໂສ້ມູນຄ່າການສົ່ງອອກການທ່ອງທ່ຽວ ສປປ ລາວ

CBI ກະຊວງການຕ່າງປະເທດໂຮນລັງ, Naut Kusters (ກັນຍາ 2017): ການທ່ອງທ່ຽວໄປກຳປູເຈຍ ແລະ ລາວ ສະແກນ (ວິເຄາະໂອກາດ) ຕະຫຼາດ EU

Chaovanapoonphol, Y. ແລະ Somyana, W. (2018). ປະສິດທິພາບການຜະລິດຂອງຊາວກະສິກອນປູກສາລີພາຍໃຕ້ສັນຍາຜູກພັນສອງສິ້ນໃນ ສປປ ລາວ, ວາລະສານວິທະຍາສາດສັງຄົມກະເສດສາດ, (xxx) 2018, ໜ້າ 1-6.

Conseil National Du Caf-Lao (ສະພາກາເຟແຫ່ງຊາດລາວ) (ເດືອນມິຖຸນາ 2014). ຍຸດທະສາດການພັດທະນາຂະແໜງກາເຟລາວ ຮອດປີ 2025, ນະຄອນຫຼວງວຽງຈັນ.

Douangsavanh, L. ແລະ Bouahom, B. (2006). ເສັ້ນທາງອອກຈາກຄວາມທຸກຍາກໂດຍການປູກສາລີ ແລະ ໝາກເດືອຍໃນສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ເອກະສານກຳລັງກຸ່ມຈັດພິມຂອງ CAPSA ເລກທີ 92, UNESCAP-CAPSA, ບາງກອກ.

FAO (ເດືອນເມສາ 2020): ສະຫລຸບຫຍໍ້ຂໍ້ມູນລວມ ຂອງປະເທດ ວັນທີ 22 ເມສາ 2020. http://www.fao.org/giews/countrybrief/country.jsp?code=LAO.

FAO (2005). ສະຫລຸບຫຍໍ້ຂໍ້ມູນລວມ ຂອງຂະແໜງການລ້ຽງສັດ: ສາທາລະນະລັດປະຊາທິປະໄຕປະຊາຊົນລາວ, ໂຣມ, ອີຕາລີ.

Gerschenkron Alexander, (1962), ຄວາມຫລ້າຫລັງທາງດ້ານເສດຖະກິດໃນທັດສະນະປະຫວັດສາດ, ໂຮງພິມມະຫາວິທະຍາໄລຮາເວີດ.

IFC, (2021). ແຜນການປະຕິຮູບດ້ານການລົງທຶນຂອງ ສປປ ລາວ: ພື້ນຖານຂອງນະໂຍບາຍແລະຍຸດທະສາດການສົ່ງເສີມການລົງທຶນໃໝ່, ໂຄງການປະຕິຮູບສະພາບບັນຍາກາດການລົງທຶນຂອງ ສປປ ລາວ, ກຸງວໍຊິງຕັນ ດີຊີ.

ອົງການຈັດຕັ້ງສາກົນເພື່ອການຍ້າຍຖິ່ນຖານ (IOM), (2019), ໃບຂໍ້ມູນຂໍ້ເທັດຈິງການເຄື່ອນຍ້າຍແຮງງານ / ເຂດເສດຖະກິດພິເສດ.

ສູນການຄ້າສາກົນ (2019). ທ່າແຮງການສົ່ງອອກໃນ ສປປ ລາວ: ໄມ້ແປຮູບ ແລະ ກະສິກຳພິເສດສະເພາະ.

Ishida, M. (2017), ບໍ່ມີວັນທີເຜີຍແຜ່, ແຕ່ຂໍ້ມູນຫຼ້າສຸດທີ່ໃຊ້ແມ່ນປີ 2016). ຕົ້ນທຶນຄ່າໃຊ້ຈ່າຍທາງດ້ານໂລຊິດສະຕິກໃນສາທາລະນະລັດປະຊາທິປະໄຕປະຊາຊົນລາວ, ສະຖາບັນເສດຖະກິດກຳລັງພັດທະ ນາ, ອົງການການຄ້າກັບພາຍນອກ ຂອງຍີ່ປຸ່ນ (ເຈໂຕຣ).

ອົງການການຮ່ວມມືສາກົນຍີ່ປຸ່ນ (2012). ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ. ການສຳຫຼວດເກັບກຳຂໍ້ມູນ ການເລືອກເຟັ້ນອາຫານປຸງແຕ່ງ ເພື່ອເປັນຈຸດສຸມ ແລະ ສົ່ງເສີມການລົງທຶນໂດຍກົງຈາກຕ່າງປະເທດ ໃນທຸລະກິດອາຫານໃນລາວ. ບົດລາຍງານສຸດທ້າຍ.

Kallio, M. H. ແລະ ຄະນະຊ່ຽວຊານ (2019). ສີ ຂອງສາລີ: ວິໄສທັດການເຕີບໂຕຕົວສີຂຽວ ແລະ ຄວາມຮັບຮູ້ຂອງຊາວກະສິກອນໃນພາກເໜືອຂອງລາວ, ນະໂຍບາຍການນຳໃຊ້ທີ່ດິນ, (80) 2019, ໜ້າ 185-94.

Khammavongsa, T. (2014). ການວິເຄາະຂະບວນການທຸລະກິດ: ການສົ່ງອອກສາລີ ແລະ ການນຳເຂົ້າອາຫານສັດໃນ ສປປ ລາວ, ESCAP, ບາງກອກ.

ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ, (2018), ແຜນຍຸດທະສາດການພັດທະນາພາກເອກະຊົນ, ນະຄອນຫຼວງວຽງຈັນ.

ສະມາຄົມກາເຟລາວ (ເດືອນມິຖຸນາ 2020). ບົດລາຍງານການຊື້ກາເຟ ລະດູການ 2019 - 2020, ນະຄອນປາກເຊ, ແຂວງຈຳປາສັກ.

ໂຄງການຄົ້ນຄວ້າກະສິກຳ ແລະ ປ່າໄມ້ເຂດເນີນສູງ ລາວ-ສະວິເດັນ/ຊູເອດ (2006). ການຜະລິດສາລີ ແລະ ຕ່ອງໂສ້ຕະຫຼາດ: ການສ້າງຂອບຂາຍການຄ້າຊາຍແດນ ແລະ ການຮ່ວມມື, ບົດລາຍງານກອງປະຊຸມສຳມະນາ ຂອງ LSUAFRP ສະບັບເລກທີ 12, ສະຖາບັນຄົ້ນຄວ້າກະສິກຳ ແລະ ປ່າໄມ້ (NAFRI), ກະຊວງກະສິກຳ ແລະ ປ່າໄມ້, ນະຄອນຫຼວງວຽງຈັນ.

Mabashi Masahito, ບັນນາທິການ (2018), ຍຸດທະສາດການພັດທະນາຂອງ 5 ຂະແໜງທີ່ໄດ້ເລືອກເອົາໃນສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (2020-205), ບົດລາຍງານໂຄງການຄົ້ນຄວ້າ ຂອງ ERIA ປີ 2018, ເລກທີ 07.

Millar, J. ແລະ Photakoun, V. (2008). ການພັດທະນາການລ້ຽງສັດ ແລະ ການຫຼຸດຜ່ອນຄວາມທຸກຍາກ: ວິວັດທະນາການແບບປະຕິວັດສຳລັບການດຳລົງຊີບຂອງປະຊາຊົນໃນເຂດເນີນສູງໃນ ສປປ ລາວ, ວາລະສານສາກົນແຫ່ງຄວາມຍືນຍົງດ້ານກະສິກຳ, 6(1) 2008, ໜ້າ 89-102.

ກະຊວງກະສິກຳ ແລະ ປ່າໄມ້ (MoAF, 2014). ສ.ປ.ປ.ລາວ: ໂຄງການຄຸ້ມຄອງຊັບພະ ຍາກອນທຳມະຊາດແບບຍືນຍົງ ແລະ ສົ່ງເສີມຜະລິດຕະພາບ. ການພັດທະນາລະບົບຕ່ອງໂສ້ມູນຄ່າກ້ວຍ, ມັນດ້າງ ແລະ ຖົ່ວດິນ ຢູ່ແຂວງຈຳປາສັກ, ສາລະວັນ ແລະ ສະຫວັນນະເຂດ. ໂຄງການເລກທີ 37579-032. ນະຄອນຫຼວງວຽງຈັນ.

MOAF (2010). ຍຸດທະສາດການພັດທະນາກະສິກຳ 2011 ຫາ 2020. ຂອບຂ່າຍຂອງຂະແໜງການ, ວິໄສທັດ ແລະ ເປົ້າໝາຍ. ກະສິກຳ ແລະ ປ່າໄມ້ ເພື່ອການພັດທະນາແບບຍືນຍົງ, ອາຫານ ແລະ ການດຳລົງຊີວິດ. ຮ່າງສຸດທ້າຍ, ນະຄອນຫຼວງວຽງຈັນ, ວັນທີ 15 ກັນຍາ 2010.

ກະຊວງສຶກສາທິການ ແລະ ກິລາ ສະໜັບສະໜູນໂດຍໂຄງການ LAO/029 ກະກຽມໂດຍ ບໍລິສັດ ທີ່ປຶກສາວິສາຫະກິດ ແລະ ການພັດທະນາ ຈຳກັດ. (ກໍລະກົດ 2018) : ການສຳຫຼວດວິສາຫະກິດທ່ອງທ່ຽວ ແລະ ການໂຮງແຮມ ໃນເລື່ອງການຈ້າງງານ ແລະ ທັກສະໃນ ສປປ ລາວ. ຜົນການຄົ້ນຄວ້າ ແລະ ການຄາດຄະເນການຈ້າງງານ 2018-2023

MOIC, ກົມແຜນການ ແລະການຮ່ວມມື, (2012). ບົດວິໄຈການເຊື່ອມໂຍງເຂົ້າສາກົນ ດ້ານການຄ້າ 2012: ແຜນດຳເນີນງານການພັດທະນາການຄ້າ ແລະພາກເອກະຊົນ, ນະຄອນຫຼວງວຽງຈັນ, ສປປ ລາວ.

MOIC, ກອງເລຂາອຳນວຍຄວາມສະດວກທາງດ້ານການຄ້າ, (2017), ແຜນດຳເນີນງານວຽກງານອຳນວຍຄວາມສະດວກທາງດານການຄ້າຂອງ ສປປ ລາວ ປີ 2017-2022.

ກະຊວງຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ: ບົດລາຍງານສະຖິຕິການທ່ອງທ່ຽວໃນລາວ ປີ 2015

ກະຊວງຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ: ບົດລາຍງານສະຖິຕິການທ່ອງທ່ຽວລາວ ປີ 2018

ກະຊວງຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ: ບົດລາຍງານສະຖິຕິການທ່ອງທ່ຽວລາວ ປີ 2019

ກະຊວງຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ: ຍຸດທະສາດການທ່ອງທ່ຽວ ສປປ ລາວ ປີ 2012-2020

ກະຊວງຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ (2018): ຍຸດທະສາດການທ່ອງທ່ຽວລາວ ປີ 2019-22

ກະຊວງຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໂດຍໄດ້ຮັບການສະໜັບສະໜູນຈາກ ADB, ໂຄງການຊ່ວຍເຫຼືອດ້ານການຕ່າງປະເທດ ແລະ ການຄ້າຂອງນິວຊີແລນ ແລະ Swisscontact ຂອງປະເທດສະວິດ (: ຍຸດທະສາດການຕະຫຼາດການທ່ອງທ່ຽວແຫ່ງຊາດ ປີ 2019-22)

ກະຊວງຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ (ກໍລະກົດ 2020) ບົດລາຍງານຜົນກະທົບຈາກພະຍາດໂຄວິດ-19 ຕໍ່ອຸດສາຫະກຳການທ່ອງທ່ຽວຢູ່ ສປປ ລາວ ແລະ ຄູ່ມືແນະນຳການຟື້ນຟູການ ທ່ອງທ່ຽວໃນຕໍ່ໜ້າ.

NIU/DPC, MOIC ແລະ ໜ່ວຍງານຈັດຕັ້ງປະຕິບັດ, (2020). ໂຄງການສົ່ງເສີມຄວາມສາມາດໃນການແຂ່ງຂັນ ແລະ ການຄ້າຂອງ ສປປ ລາວ, ບົດລາຍງານຄວາມຄືບໜ້າການຈັດຕັ້ງປະຕິບັດໂຄງການກາງສະໄໝ (2019-2020) ແລະ ແຜນວຽກປີ 2021, ນະຄອນຫຼວງວຽງຈັນ, ສປປ ລາວ.

ສະຖາບັນຄົ້ນຄວ້າກະສິກຳ ແລະ ປ່າໄມ້ແຫ່ງຊາດ (2005). ການສົ່ງເສີມການປູກຖົ່ວເຫຼືອງເປັນພືດສິນຄ້າ: ຕົວກຳນົດ ແລະ ຜົນກະທົບທີ່ເປັນໄປໄດ້, ບົດລາຍງານພາກສະໜາມຂອງ LSUAFRP ສະບັບເລກທີ 2005/09, ໂຄງການຄົ້ນຄວ້າກະສິກຳ ແລະ ປ່າໄມ້ເຂດເນີນສູງ ລາວ-ຊູເອດ.

Napaserth, P. ແລະ Napasirth, V (2018). ສະຖານະການປັດຈຸບັນ ແລະ ການຄາດການອະນາຄົດຂອງການຜະລິດຊີ້ນງົວໃນສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ - ບົດທົບທວນ ຂອງວາລະສານວິທະສາດສັດຂອງອາຊີ-ອົດສະຕຣາເລຊີ(ອົດສະຕຣາລີ, ນິວຊີແລນ ແລະ ເກາະດອນໃກ້ຄຽງໃນປາຊີຟິກໃຕ້), ເຫລັ້ມ 31, ເລກທີ 7:961-7, ກໍລະກົດ 2018.

Nishimura Hidetoshi, F. Kimura, M. Ambashi, ແລະ S. Keola, ສປປ ລາວ ຕັ້ງຢູ່ຈຸດທາງຄືບ: ຍຸດທະສາດການພັດທະນາອຸດສາຫະກຳ ປີ 2016 - 2030, ERIA, 2016.

Phonvisay, A., Ouanesamone, P,. ແລະ Souvannavong, P. (ປັບປຸງໃໝ່). ການປະເມີນການຄ້າງົວໃນ ສປປ ລາວ: ສຶກສາຜົນກະທົບທີ່ອາດເກີດຂຶ້ນຈາກການເປີດເສລີການຄ້າພາຍໃຕ້ AFTA ກ່ຽວກັບການຄ້າງົວ ແລະ ຜົນກະທົບຂອງນະໂຍບາຍການພັດທະນາງົວໃນ ສປປ ລາວ, ສະຖາບັນຄົ້ນຄວ້າກະສິກຳ ແລະ ປ່າໄມ້ແຫ່ງຊາດ, ກະຊວງກະສິກຳ ແລະ ປ່າໄມ້, ນະຄອນຫຼວງວຽງຈັນ.

Southichack, M. (2009). ເສດຖະກິດກາເຟລາວ: ວິຖີທາງແບບໃໝ່ສູ່ການເຕີບໂຕທີ່ກຳລັງຈະກາຍເປັນຈິງ? ບໍລິສັດ Intergro Inc. (ໃນປີ 2010 ໄດ້ປ່ຽນເປັນ ບໍລິສັດ ລາວ ອິນເຕີໂກຣ ຈຳກັດຜູ້ດຽວ).

Stur, W. ແລະ Phengsavanh, P. (2014?). ບົດຮຽນຈາກໂຄງການພັດທະນາການລ້ຽງສັດພາກ ເໜືອ (LDP) ແລະ ການປະເມີນລະບົບຕ່ອງໂສ້ມູນຄ່າການລ້ຽງສັດໃນພາກເໜືອຂອງ ສປປ ລາວ, ກອງທຶນສາກົນເພື່ອການພັດທະນາກະສິກຳ (IFAD).

Swisscontact (ມັງກອນ 2016): ແຜນການຄຸ້ມຄອງຈຸດໝາຍປາຍທາງການທ່ອງທ່ຽວຂອງ ສປປ ລາວ ປີ 2016-2018

QUO (2017): ຍຸດທະສາດ ແລະ ວັດທະນະທຳດ້ານຍີ່ຫໍ້ ຂອງລາວ

ສະຫະປະຊາຊາດ ແລະ ການຕອບໂຕ້ ໂຄວິດ-19, ITC, MOIC (2020): ຂະແໜງການຄ້າ ແລະພາກເອກະຊົນ, ລະບົບຕ່ອງໂສ້ມູນຄ່າ ແລະການທ່ອງທ່ຽວ: ຮ່າງເອກະສານ ຂອງໜ່ວຍງານສະເພາະກິດຂອງຫຼາຍພາກສ່ວນທີ່ກ່ຽວຂ້ອງ ກ່ຽວກັບປະຫວັດຄວາມເປັນມາເພື່ອສຶກສາຜົນກະທົບຂອງ COVID-19 ເພື່ອສະໜັບສະໜູນການກຳນົດ NSEDP ຄັ້ງທີ 9 ແລະປັບ SDG ໃຫ້ເຂົ້າກັບຄວາມເປັນຕົວຈິງຂອງທ້ອງຖິ່ນ ໃນ ສປປ ລາວ

ກອງປະຊຸມສະຫະປະຊາຊາດກ່ຽວກັບການຄ້າ ແລະການພັດທະນາ (UNCTAD, 2020). ສາທາລະນະລັດປະຊາທິປະໄຕ ປະຊາຊົນລາວ: ການຫັນເປັນການຄ້າແບບຍືນຍົງໃນຕ່ອງໂສ້ມູນຄ່າກາເຟ, ສົ່ງເສີມການພັດທະນາການສົ່ງອອກສີຂຽວໂດຍຜ່ານມາດຕະຖານຄວາມຍືນຍົງແບບສະໝັກໃຈ.

UNCTAD (2021), ສະພາບຂໍ້ມູນລວມດ້ານຄວາມບອບບາງ ຂອງ ສປປ ລາວ, ເຊີແນວ (ເຈນີວາ).

UNIDO, (2020), ການປະເມີນຜົນກະທົບຂອງ ໂຄວິດ-19 ຕໍ່ກັບວິສາຫະກິດອຸດສາຫະກຳປຸງແຕ່ງ ຂອງ ສປປ ລາວ: ຜົນການສຳຫຼວດ ເດືອນພຶດສະພາ-ມິຖຸນາ.

Valakone, K. (2016). ການທົບທວນເອກະສານຄົ້ນຄວ້າກ່ຽວກັບການສ້າງຍຸດທະສາດຂະແໜງການກາເຟສຳລັບແຂວງຊຽງຂວາງ, ພາກທີ 2: ການພັດທະນາຂະແໜງກາເຟ ຢູ່ແຂວງຊຽງຂວາງ ເພື່ອເປັນແນວທາງການຈັດຕັ້ງປະຕິບັດແຜນຍຸດທະສາດການພັດທະນາຂະແໜງກາເຟລາວ ອົງການ Helvetas Laos.

Viau, J., KeoPhosay, A., ແລະ Castella, J-C (2009). ຜົນກະທົບຂອງການຂະຫຍາຍຕົວຂອງສາລີຕໍ່ລະບົບການຜະລິດເຂົ້າພື້ນເມືອງຢູ່ພາກເໜືອຂອງ ສປປ ລາວ: ກໍລະນີສຶກສາຢູ່ເມືອງຊຽງຄໍ້ ແຂວງຫົວພັນ, ໂຄງການເພື່ອໃຫ້ຕາມທັນແຂວງອື່ນ, NAFRI, ນະຄອນຫຼວງວຽງຈັນ, ລາວ.

Vongvisouk, T., Broegaard, R.B., Mertz, O., Thongmanivong, S. (2016). ການເຫົ່າກັນຫັນມາປູກພືດເປັນສິນຄ້າເພື່ອຫາລາຍໄດ້ ແລະ ການປົກປ້ອງປ່າໄມ້: ບໍ່ມີທັງການປະຢັດການນຳໃຊ້ເນື້ອທີ່ດິນແລະ ບໍ່ມີທັງການນຳໃຊ້ທີ່ດິນຮ່ວມກັນ, ນະໂຍບາຍການນຳໃຊ້ທີ່ດິນ (55) 2016, ໜ້າ 182-192. https://doi.org/10.1016/j.landusepol.2016.04.001.

Winston, E., ແລະ ຄະນະຊ່ຽວຊານ (2005). ຄູ່ມືກາເຟອາຣາບິກາ ສຳລັບ ສປປ ລາວ, ຫ້ອງການອົງການ FAO ປະຈຳພາກພື້ນອາຊີ ແລະ ປາຊີຟິກ, ບາງກອກ.

ທະນາຄານໂລກ, Iain Christie, Eneida Fernandes, Hannah Messerli, ແລະ Louise Twining-Ward (2013): ການທ່ອງທ່ຽວໃນອາຟຣິກກາ ໃຊ້ປະໂຫຍດຈາກການທ່ອງທ່ຽວເພື່ອການຈະເລີນເຕີບໂຕ ແລະ ການມີຊີວິດການເປັນຢູ່ທີ່ປັບປຸງດີຂຶ້ນ - ບົດທີ 6 ເລື່ອງຂໍ້ຈຳກັດ ແລະ ວິທີແກ້ໄຂສຳລັບການເຕີບໂຕຂອງການທ່ອງທ່ຽວ

ທະນາຄານໂລກ, (2014), ການປະເມີນສະພາບບັນຍາກາດການລົງທຶນຢູ່ ສປປ ລາວ 2014: ຄວາມບໍ່ແນ່ນອນທາງດ້ານນະໂຍບາຍໃນທ່າມກາງການເພີ່ມຄວາມຈະເລີນເຕີບໂຕຢ່າງໄວວາຈາກການຂຸດຄົ້ນຊັບພະຍາກອນທຳມະຊາດ, ກຸງວໍຊິງຕັນ ດີຊີ.

ທະນາຄານໂລກ (2016). ພາບລວມການປຽບທຽບການມີການນຳໃຊ້ມາດຕະການກີດກັນການຄ້າທີ່ບໍ່ແມ່ນພາສີ ໃນ ສປປ ລາວ, ລາຍງານເລກທີ: AUS9097.

ທະນາຄານໂລກ, (2016), ສະພາບລວມການປຽບທຽບການມີການນຳໃຊ້ມາດຕະການກີດກັນທີ່ບໍ່ແມ່ນພາສີຕໍ່ການຄ້າໃນ ສປປ ລາວ, ບົດລາຍງານເລກທີ AUS9097, ກຸງວໍຊິງຕັນ ດີຊີ.

ທະນາຄານໂລກ, (2016), ຜົນກະທົບດ້ານແຮງງານຂອງການເຕີບໂຕຂອງການສົ່ງອອກຂອງລາວ, ບົດລາຍງານສະບັບເລກທີ AUS9112, ກຸງວໍຊິງຕັນ ດີຊີ.

ທະນາຄານໂລກ, (2017), ສປປ ລາວ, ການສຶກສາ ແບບພິນິດພິເຄາະທີ່ເປັນລະບົບຂອງປະເທດ: ບຸລິມະສິດສຳລັບການເຮັດໃຫ້ຄວາມທຸກຍາກໝົດໄປ ແລະ ການຊຸກຍູ້ສົ່ງເສີມຄວາມຈະເລີນຮຸ່ງເຮືອງຮ່ວມກັນ, ບົດລາຍງານສະບັບເລກທີ 112241-LA https://documents1.worldbank.org/curated/en/983001490107755004/pdf/Lao-PDR-SCD-03-09-2017-03162017.pdf

ທະນາຄານໂລກ (ເດືອນມິຖຸນາ 2018). ການຜະລິດເຂົ້າ ແລະ ພືດຜັກເປັນສິນຄ້າ ຢູ່ ສປປ ລາວຕາມລະບົບຕ່ອງໂສ້ມູນຄ່າ: ສະຖານະພາບ ແລະ ທ່າອ່ຽງ, ບົດລາຍງານໝາຍເລກ: AUS000419.

ທະນາຄານໂລກ, (2018), ຕົ້ນທຶນຄ່າໃຊ້ຈ່າຍໃນການຂົນສົ່ງ ແລະລາຄາໃນ ສປປ ລາວ: ການປົດລັອກທ່າແຮງຂອງກອງຂົນສົ່ງທີ່ວ່າງງານ, ບົດລາຍງານໝາຍເລກ AUS0000443. https://documents1.worldbank.org/curated/en/469191543240299696/pdf/Transport-Costs-and-Prices-in-Lao-PDR-Unlocking-the-Potential-of-an-Idle-Fleet.pdf

ທະນາຄານໂລກ, (2019), ການພັດທະນາການທ່ອງທ່ຽວທຳມະຊາດເປັນຂະແໜງການຍຸດທະສາດເພື່ອການເຕີບໂຕສີຂຽວໃນ ສປປ ລາວ, ບົດລາຍງານສັງເຄາະ, ກຸງວໍຊິງຕັນ ດີຊີ. https://openknowledge.worldbank.org/bitstream/handle/10986/33095/Synthesis-Report.pdf?sequence=1&isAllowed=y

ທະນາຄານໂລກ, (2019). ໂຄງການພັດທະນາການຄ້າຄັ້ງທີສອງ, ບົດລາຍງານການສິ້ນສຸດ ແລະຜົນໄດ້ຮັບຂອງໂຄງການ, ບົດລາຍງານທີ: ICR00004637, ກຸງວໍຊິງຕັນ ດີຊີ.

ທະນາຄານໂລກ, (2020), ສະພາບຂໍ້ມູນລວມກ່ຽວກັບຄວາມທຸກຍາກໃນ ສປປ ລາວ: ບົດລາຍງານຄວາມທຸກຍາກສຳລັບການສຳຫຼວດການຊົມໃຊ້ ແລະ ການໃຊ້ຈ່າຍ ຂອງຄົວເຮືອນ ຂອງລາວ 2018 - 2019.

ທະນາຄານໂລກ (ກໍລະກົດ 2020): ການຟື້ນຟູ-ການທ່ອງທ່ຽວ-ຄວາມສາມາດໃນການແຂ່ງຂັນ-ການທ່ອງທ່ຽວ-ການຕອບສະໜອງ-ການຟື້ນຟູ-ແລະ-ຄວາມຢືດຢຸ່ນ-ຕໍ່ວິກິດການໂຄວິດ-19

ທະນາຄານໂລກ, (2020), ການຕິດຕາມຜົນຂອງພະຍາດໂຄວິດ-19 ທີ່ມີຕໍ່ຄົວເຮືອນໃນ ສປປ ລາວ, ບົດລາຍງານສະບັບເລກທີ 1, ເດືອນມິຖຸນາ ຫາ ກໍລະກົດ 2020.

ທະນາຄານໂລກ, (2020), ຈາກປະເທດທີ່ບໍ່ມີຊາຍແດນຕິດກັບທະເລ ໄປສູ່ການເປັນປະເທດເຊື່ອມຕໍ່: ໄຂກຸນແຈ ເປີດທ່າແຮງຂອງການເຊື່ອມຈອດດ້ວຍເສັ້ນທາງລົດໄຟລາວ-ຈີນ, ວໍຊິງຕັນ ດີຊີ.

ທະນາຄານໂລກ, (2021), ການຕິດຕາມເສດຖະກິດຂອງລາວ, ການຊ່ວຍໜູນດ້ານການຟື້ນຕົວທາງດ້ານເສດຖະກິດ-ພາກຫົວຂໍ້: ຊີວິດການເປັນຢູ່ໃນຊ່ວງເວລາຂອງ ໂຄວິດ-19, ມັງກອນ 2021. https://pubdocs.worldbank.org/en/306131610167443727/Lao-PDR-Economic-Monitor-January-2021-Supporting-Economic-Recovery-Thematic-section-Livelihoods-in-the-Time-of-COVID-19.pdf

ທະນາຄານໂລກ, (2021), ການຕິດຕາມເສດຖະກິດຂອງລາວ, ສິງຫາ 2021.

ທະນາຄານໂລກ, (2021). ພາລະໜ້າທີ່ຂອງຄະນະຜູ້ຊ່ຽວຊານທີ່ປຶກສາ ຂອງໂຄງການສົ່ງເສີມຄວາມສາມາດໃນການແຂ່ງຂັນ ແລະ ການຄ້າ ຂອງ ສປປ ລາວ (P164813), ບົດບັນທຶກຊ່ວຍຈຳ, ວັນທີ 1-17 ກຸມພາ 2021, ວໍຊິງຕັນ ດີຊີ.

ທະນາຄານໂລກ, (2021), ການຕິດຕາມຜົນ ຂອງພະຍາດໂຄວິດ-19 ທີ່ມີຕໍ່ຄົວເຮືອນໃນ ສປປ ລາວ, ບົດລາຍງານສະບັບທີ 2, ເດືອນກຸມພາ - ມີນາ 2021.

ທະນາຄານໂລກ, (2021), ການຕິດຕາມ ຄົວເຮືອນໃນ ສປປ ລາວ, ບົດລາຍງານສະບັບທີ 3, ເດືອນເມສາ ຫາ ພຶດສະພາ 2021.

ການສຶກສາໃນໂລກ (2016). ບົດລາຍງານການປະເມີນລະບົບຕ່ອງໂສ້ມູນຄ່າ - ເລົ່າງາມ. ການປະເມີນລະບົບຕ່ອງໂສ້ມູນຄ່າເພື່ອສະໜັບສະໜູນຊີວິດການເປັນຢູ່ແບບຍືນຍົງໃຫ້ແກ່ຄົນທຸກຍາກໂດຍຜ່ານການພັດທະນາເສດຖະກິດແບບທົ່ວເຖິງຂອງເມືອງເລົ່າງາມ, ແຂວງສາລະວັນ.

ອົງການການຄ້າໂລກ, (2020), ການທົບທວນຄືນນະໂຍບາຍການຄ້າຂອງ ສປປ ລາວ, ບົດລາຍງານໂດຍກອງເລຂາ WTO, WT/TPR/S/394/Rev.1, ເຊີແນວ.

ເວັບໄຊທ່ອງທ່ຽວ ສປປ ລາວ

www.tourismlaos.org

http://www.ecotourismlaos.com/



## ເອກະສານຊ້ອນທ້າຍ ກ ແຜນພັດທະນາຂະແໜງການຄ້າ ແລະ ພາກເອກະຊົນ 2012 ສະຖານະພາບໃນປີ 2021

### ຕາຕະລາງ 1: ບົດ DTIS ຂອງ ສປປ ລາວ ປັບປຸງໃໝ່ - ຂອບການຕິດຕາມ & ປະເມີນຜົນ ພ້ອມດ້ວຍຕົວຊີ້ວັດຂອງເປົ້າໝາຍ ແລະ ລະດັບຜົນອອກມາ

| ລະດັບ | ພື້ນທີ່ຜົນຮັບ | ຕົວຊີ້ວັດ | ຜົນໄດ້ມາໃນ ປີ 2021(ນັບແຕ່ 2012/13) |
|---|---|---|---|
| ເປົ້າໝາຍ ການ ພັດທະນາ | ການເຕີບໂຕທີ່ເປັນທຳ | • ອັດຕາການເຕີບໂຕຂອງ GDP | • 7,0% (ຄ່າສະເລ່ຍ 2012-19; ຫລຸດຈາກ 8,2% ໃນປີ 2012 ເປັນ 6,3% ໃນປີ 2018 ແລະ ເປັນ 4,7% ໃນປີ 2019 (ທະນາຄານໂລກ (WB)) |
| | | • ການກະຈາຍຄວາມມັ່ງຄັ້ງຮັ່ງມີ (ສຳປະສິດ ຈີນີ) (GII) | • 38,8 (2018/19; ເພີ່ມຈາກ 36 ໃນປີ 2012/13 (WB)) |
| | | • ອັດຕາສ່ວນຮ້ອຍຂອງປະຊາຊົນທີ່ຢູ່ຕ່ຳກວ່າເສັ້ນຄວາມທຸກຍາກ | • 18,3% (2018/19; ຫລຸດຈາກ 24,6% ໃນປີ 2012/13 (WB) |
| | | • ການກະຈາຍຄວາມທຸກຍາກຕາມພາກ | • ຄວາມບໍ່ສະເໝີພາບຂອງຄວາມທຸກຍາກເປັນພາກຫຼຸດລົງ ໂດຍໃນພາກເໜືອ ແລະພາກໃຕ້ຫຼຸດລົງໄວກວ່າພາກກາງ (WB) |
| | | • ດັດຊະນີຄວາມບໍ່ສະເໝີພາບລະຫວ່າງຍິງ-ຊາຍ | • GII ເທົ່າກັບ 0,463 ໃນປີ 2018 ເປັນການປັບປຸງເລັກນ້ອຍຈາກ 0,483 ໃນປີ 2012, ເຖິງແມ່ນວ່າການຈັດອັນດັບຫຼຸດລົງຈາກອັນດັບທີ 100 ໃນປີ 2012 ມາເປັນທີ 110 (ຈາກ 189 ປະເທດ) ໃນປີ 2018 (UNDP) |
| | | • ດັດຊະນີການພັດທະນາ(ຫລື ດັດຊະນີການພັດທະນາມະນຸດແບບໄດ້ປັບຄວາມບໍ່ສະເໝີພາບ)(IHDI) | • IHDI ເທົ່າກັບ 0,461 ແລະ ຄ່າ HDI (ດັດຊະນີການພັດທະນາມະນຸດ) ເທົ່າກັບ 0,613 ໃນປີ 2019, ຕາມລຳດັບ |

| | | | |
|---|---|---|---|
| | | • ອັດຕາການວ່າງງານ | ແມ່ນໄດ້ປັບປຸງຈາກ 0,409 ແລະ 0,543 ໃນປີ 2012; ໃນປີ 2019 IHDI ຂອງ ສປປ ລາວ ຈັດລະດັບກັບປະເທດໃນໂລກ ຢູ່ໃນອັນດັບທີ 137, ຈັດເຂົ້າໃນກຸ່ມປະເທດທີ່ມີ HD (ການພັດທະນາຄົນ) ປານກາງ (UNDP).<br><br>• 9,4% (ການສຳຫຼວດກຳລັງແຮງງານຂອງສປປລາວ 2017), ເພີ່ມຂຶ້ນຈາກ 2% ໃນປີ 2010, ເນື່ອງຈາກການປ່ຽນແປງຄຳນິຍາມຂອງກຳລັງແຮງງານໃນການສຳຫຼວດ 2017, ເຊິ່ງບໍ່ລວມເອົາຜູ້ທີ່ປະກອບອາຊີບໃນການຜະລິດເພື່ອຊົມໃຊ້ເອງ, ເຮັດໃຫ້ຂະໜາດແລະ ອັດຕາການມີສ່ວນຮ່ວມຂອງກຳລັງແຮງງານຫຼຸດລົງ). ຢ່າງໃດກໍ່ຕາມ, ຖ້າວ່າຄຳນິຍາມຂອງກຳລັງແຮງງານປີ 2010 ຫາກຖືກນຳມາໃຊ້ສຳລັບປີ 2017, ອັດຕາການວ່າງງານໃນປີ 2017 ກໍ່ຈະບໍ່ປ່ຽນແປງ. |
| | **ການຫລຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ** | • ລາຍໄດ້ຕໍ່ຫົວຄົນ (GNI ຕໍ່ຫົວຄົນ, ບໍ່ໄດ້ປັບໃຫ້ເປັນຄ່າສະເໝີພາບທີ່ກຳນົດໂດຍອຳນາດຊື້)<br><br>• ການຫຼຸດຜ່ອນຄວາມບອບບາງດ້ານເສດຖະກິດ (ດັດຊະນີຄວາມບອບບາງຂອງເສດຖະກິດ) (EVI) | • $2.449 (ການທົບທວນ 2021; ຂີດແບ່ງການເລີ່ມຫລຸດພົ້ນຈາກຄວາມດ້ອຍພັດທະ ນາ: $1.222 ຫລື ສູງກວ່ານັ້ນ ຫລື ລາຍໄດ້ຢ່າງດຽວ $2.444); ໄດ້ມີການສະເໜີແນະໃຫ້ ສປປ ລາວ ຫລຸດພົ້ນໃນປີ 2026, ໂດຍມີການກະກຽມຕື່ມອີກສອງປີຈາກທຳອິດແມ່ນປີ 2024; ໄດ້ມີການປັບປຸງຈາກ $1.996 ໃນການທົບທວນ ປີ 2018 ແລະ ຈາກ $913 ໃນການທົບທວນປີ 2012 |

| | | | |
|---|---|---|---|
| | | | • EVI ເທົ່າກັບ 27,0 (ທົບທວນ ປີ 2021); ຂີດແບ່ງການເລີ່ມຫລຸດພົ້ນຈາກຄວາມດ້ອຍພັດທະນາ: 32 ຫລື ຕໍ່າກວ່ານັ້ນ; ໄດ້ມີການປັບປຸງຈາກ 33,7 ໃນການທົບທວນປີ 2018 ແລະ ຈາກ 37,06 ໃນການທົບທວນປີ 2012 |
| **ຜົນໄດ້ທາງຍຸດທະສາດ** | **ການພັດທະນາການຄ້າ ແລະ ທຸລະກິດທີ່ຍືນຍົງເພື່ອການຫລຸດຜ່ອນຄວາມທຸກຍາກ ແລະ ການຫລຸດພົ້ນຈາກສະຖານະພາບປະເທດດ້ອຍພັດທະນາພ້ອມທັງການມີພື້ນຖານເສດຖະກິດທີ່ມີຄວາມຫລາກຫລາຍ.** | • ດັດຊະນີການກະຈຸກຕົວຂອງການສົ່ງອອກ (ECI)<br>• ອັດຕາການເຕີບໂຕຕໍ່ປີຂອງມູນຄ່າການສົ່ງອອກສິ່ງທີ່ບໍ່ແມ່ນຊັບພະຍາ ກອນ (EVI – ຄວາມບໍ່ມີສະຖຽນລະພາບຂອງການສົ່ງອອກ) ໂດຍມີເປົ້າໝາຍ 18% ຕໍ່ປີ (NSDP 7)<br>• ການຂະຫຍາຍຕົວທີ່ແທ້ຈິງຂອງການຄ້າທັງໝົດ (ການສົ່ງອອກ + ການນໍາເຂົ້າ) ຂອງສິນຄ້າ ແລະການບໍລິການ<br>• ມູນຄ່າການສົ່ງອອກສິ່ງທີ່ບໍ່ແມ່ນຊັບພະຍາກອນທໍາມະຊາດ<br>• ມູນຄ່າການຄ້າບໍລິການ | • ECI ເທົ່າກັບ 17,4 (ທົບທວນປີ 2021), ຖືວ່າໄດ້ປັບປຸງຈາກ 22,4 ໃນການທົບທວນປີ 2015 ແລະ ຈາກ 27,6 ໃນການທົບທວນປີ 2012<br>• ອຸດສາຫະກໍາປຸງແຕ່ງໄດ້ຂະຫຍາຍຕົວ 5,0% ຕໍ່ປີ ໃນໄລຍະ 2013-18 (WTO); ດັດຊະນີຄວາມບໍ່ໝັ້ນຄົງດ້ານການສົ່ງອອກໄດ້ຮັບການປັບປຸງ, ໂດຍມີຄ່າ 10,2 ໃນການທົບທວນປີ 2012, ຈາກ 24,0 ໃນການທົບທວນປີ 2018, 24,2 ໃນການທົບທວນປີ 2015, 17,3 ໃນການທົບທວນປີ 2012<br>• 49,5% ໃນໄລຍະ 2013 – 18, ຫລື 9,9% ຕໍ່ປີ (WTO ແລະ MOIC)<br>• ມູນຄ່າການສົ່ງອອກສິ່ງທີ່ບໍ່ແມ່ນຊັບພະຍາກອນທໍາມະຊາດເພີ່ມຂຶ້ນ<br>• ມູນຄ່າການຄ້າການບໍລິການເພີ່ມຂຶ້ນຈາກ 645,8 ລ້ານໂດລາສະຫະລັດໃນປີ 2012 ເປັນ 883,7 ລ້ານໂດລາໃນປີ 2017, ໂດຍແມ່ນ "ການທ່ອງທ່ຽວ" ກວມເອົາ 79,5% ໃນປີ 2012 |

| | | | |
|---|---|---|---|
| | | • ອັດຕາການເຕີບໂຕສະເລ່ຍຕໍ່ປີຂອງຈຳນວນວິສາຫະກິດໃໝ່ທີ່ໄດ້ຂຶ້ນທະບຽນໃນຂະແໜງການທີ່ສຳຄັນ, ໃນນັ້ນ XX% ລວມມີວິສາຫະກິດແມ່ຍິງເປັນເຈົ້າຂອງ ແລະ XX% ແມ່ນຢູ່ໃນບັນດາແຂວງຈຸດສຸມຂອງການຫຼຸດຜ່ອນຄວາມທຸກຍາກ.<br><br>• ການເພີ່ມຂຶ້ນຂອງການລົງທຶນທີ່ MOIC ຄຸ້ມຄອງ (ການລົງທຶນພາຍໃນ ແລະ ຕ່າງປະເທດ FDI) | ແລະ ເພີ່ມຂຶ້ນເປັນ 86,1% ໃນປີ 2017, ໄດ້ຮັບການປະກອບສ່ວນຈາກການຂະຫຍາຍຕົວຂອງການທ່ອງທ່ຽວ (WTO)<br><br>• ຈຳນວນວິສາຫະກິດໃໝ່ໃນຂະແໜງການທີ່ບໍ່ແມ່ນຊັບພະຍາກອນທີ່ໄດ້ຂຶ້ນທະບຽນຕໍ່ປີເພີ່ມຂຶ້ນຈາກ 4.353 ຫົວໜ່ວຍໃນປີ 2015 ເປັນ 8.859 ຫົວໜ່ວຍໃນປີ 2018, ເຊິ່ງລື່ນກາຍຄາດໝາຍເດີມ 4.658 ຫົວໜ່ວຍ ຮອດເດືອນກັນຍາ 2018 (WB).<br>• ສ່ວນແບ່ງຂອງວິສາຫະກິດທີ່ແມ່ຍິງມີສ່ວນຄຸ້ມຄອງ/ເປັນເຈົ້າຂອງໃນວັນທີ 31 ມັງກອນ 2019 ແມ່ນ 36,5%, ບໍ່ໄດ້ຕາມເປົ້າໝາຍເດີມຄື 47,0 ເຊິ່ງຕ້ອງບັນລຸໄດ້ພາຍໃນວັນທີ 1 ສິງຫາ 2016. ຜົນໄດ້ຮັບນີ້ອາດເກີດຈາກການປ່ຽນແປງຄ່າທີ່ກຳນົດໃຫ້ໃນການສຳຫຼວດວິສາຫະກິດ (WB). ຢ່າງໃດກໍດີ, ຫົວໜ່ວຍທຸລະກິດທີ່ແມ່ຍິງເປັນເຈົ້າຂອງ ເຊິ່ງກວມເຖິງ 45,4% ຂອງ 90.160 ຫົວໜ່ວຍທີ່ໄດ້ຂຶ້ນທະບຽນນຳ MOIC ໃນໄລຍະປີ 2013 – 2020 ເຫັນວ່າມີສິ່ງບົ່ງບອກທີ່ດີຫລາຍກວ່າທີ່ຈະໄດ້ຄາດໝາຍ.<br><br>• ການຂຶ້ນທະບຽນທຸລະກິດເພີ່ມຂຶ້ນເປັນ 90.160 ຫົວໜ່ວຍໃນທົ່ວປະເທດ ລະຫວ່າງປີ 2013 ຫາ 2020, ໂດຍແມ່ນການ |

| | | | |
|---|---|---|---|
| | | | ລົງທຶນພາຍໃນ 90,7%. ແມ່ຍິງເປັນເຈົ້າຂອງສໍາລັບການລົງທຶນພາຍໃນກວມເອົາພຽງແຕ່ 48,8%, ໃນຂະນະທີ່ FDI, ແມ່ນມີເຖິງ 14,6%. |
| **ບັນດາເສົາຄໍ້າ(ບັນດາພື້ນທີ່ຂອງຜົນໄດ້ຮັບ)** | 1. ສະພາບແວດລ້ອມການຄ້າ ແລະການລົງທຶນທີ່ເອື້ອອໍານວຍໄດ້ຮັບການສ້າງຂຶ້ນໂດຍຜ່ານ:<br>• ການເຊື່ອມໂຍງດ້ານການຄ້າ (ພາຍຫຼັງການເຂົ້າເປັນສະມາຊິກ **WTO** ແລະ ກ້າວໄປສູ່ **AEC)**<br>• ສະພາບແວດລ້ອມທາງທຸລະກິດ<br>• ການອໍານວຍຄວາມສະດວກທາງດ້ານການ | • ອັດຕາສ່ວນການເປີດກວ້າງ (ສ່ວນແບ່ງການຄ້າໃນ GDP ຄິດເປັນສ່ວນຮ້ອຍ): ເປົ້າໝາຍ NSEDP ແມ່ນ 100% ໃນປີ 2015<br>• ອັດຕາການເຂົ້າສູ່ທຸລະກິດໃໝ່ເພີ່ມຂຶ້ນ<br>• ການຫຼຸດຜ່ອນຄ່າໃຊ້ຈ່າຍໃນການປະ ຕິບັດຕາມລະບຽບການດ້ານທຸລະກິດ (ບົດລາຍງານຄວາມງ່າຍດາຍໃນການດໍາເນີນທຸລະກິດໂດຍທະນາ ຄານໂລກ) (WB ES)<br>○ ການຫຼຸດຜ່ອນເວລາແລະຄ່າໃຊ້ຈ່າຍໃນການເລີ່ມຕົ້ນທຸລະກິດ<br>○ ການຫຼຸດຜ່ອນເວລາ ແລະຄ່າໃຊ້ຈ່າຍສໍາລັບການຄ້າຂ້າມຊາຍແດນ | • ສ່ວນແບ່ງການຄ້າໃນ GDP ຫຼຸດລົງຈາກ 90% ໃນປີ 2012 ເປັນ 72% ໃນປີ 2019 (ຂໍ້ມູນ ADB)<br>• ການຂຶ້ນທະບຽນທຸລະກິດໃໝ່ປະຈໍາປີໃນຂະແໜງການທີ່ບໍ່ແມ່ນຊັບພະຍາກອນເພີ່ມຂຶ້ນຈາກ 4.353 ໃນວັນທີ 1 ມິຖຸນາ 2015 ເປັນ 8.859 ຫົວໜ່ວຍ ໃນວັນທີ 31 ທັນວາ 2019 (WB)<br>• ການຄ້າຂ້າມຊາຍແດນຕິດອັນດັບທີ 78 ໃນປີ 2020, ປັບປຸງຈາກອັນດັບທີ 160 ໃນປີ 2013, ໂດຍໃຊ້ເວລາໃນການປະຕິບັດຕາມກົດໝາຍຫຼຸດລົງຈາກ 26 ວັນ ມາເປັນປະມານ 3 ວັນ.<br>• ການເລີ່ມຕົ້ນທຸລະກິດຢູ່ໃນອັນດັບທີ 181 ໃນປີ 2020, ໃຊ້ເວລາໂດຍສະເລ່ຍ 173 ມື້ເພື່ອເລີ່ມຕົ້ນທຸລະກິດໄດ້; ການຈັດອັນດັບຫຼຸດລົງຈາກອັນດັບ 81 ໃນປີ 2013, ຕອນນັ້ນໃຊ້ເວລາພຽງ 92 ມື້ໂດຍສະເລ່ຍເພື່ອເລີ່ມຕົ້ນທຸລະກິດ. |

| | | | |
|---|---|---|---|
| | ຄ້າ<br>• ພື້ນຖານໂຄງລ່າງທາງດ້ານລະບົບກົງຈັກຂອງວຽກງານຄຸນນະພາບ ແລະ ມາດຕະຖານແຫ່ງຊາດ | ○ ການຫຼຸດຜ່ອນເວລາຂອງຜູ້ບໍລິຫານລະດັບສູງທີ່ໃຊ້ໃນການຈັດການກັບລະບຽບການຂອງລັດຖະບານ<br>• ອັດຕາສ່ວນຮ້ອຍຂອງການຄ້າທີ່ເກີດຂື້ນພາຍໃຕ້ສັນຍາຄວາມຕົກລົງການໃຫ້ສິດທິພິເສດທາງການຄ້າ (ອັດຕາການນໍາໃຊ້ສິດທິພິເສດ)<br>• ການມີສ່ວນຮ່ວມຂອງແມ່ຍິງໃນເສດຖະກິດໄດ້ເພີ່ມທະວີຂຶ້ນ | • ຄວາມໂປ່ງໃສທີ່ເພີ່ມຂຶ້ນເຮັດໃຫ້ຜູ້ບໍລິຫານລະດັບສູງຕ້ອງການໃຊ້ເວລາຈັດການກັບລະບຽບການຂອງລັດຖະບານໜ້ອຍລົງ<br>• ສປປ ລາວ ສົ່ງອອກພາຍໃຕ້ສັນຍາຄວາມຕົກລົງການໃຫ້ສິດທິພິເສດດ້ານການຄ້າ ເຊິ່ງກວມ 24,3% ໃນປີ 2018, ຫຼຸດລົງຈາກ 27,2% ຂອງການສົ່ງອອກທັງໝົດໃນປີ 2013 (ຂໍ້ມູນການຄ້າ MOIC)<br>• ໃນກໍາລັງແຮງງານຂອງປະເທດ, ແມ່ຍິງ ກວມເອົາ 73% ທຽບກັບ 78% ທີ່ເປັນການປະກອບສ່ວນຂອງຜູ້ຊາຍ, ໃນຈໍານວນພະນັກງານພາລະກອນ ແມ່ຍິງມີເຖິງ 46% ແລະ 43% ຂອງວິສາຫະກິດແມ່ນມີຜູ້ຍິງເປັນຜູ້ຈັດການລະດັບສູງ, ສູງກວ່າບັນດາປະເທດອາຊີຕາເວັນອອກ ແລະ ປາຊີຟິກ ແລະ ບັນດາປະເທດທີ່ມີລາຍໄດ້ປານກາງຕໍ່າ (ການສໍາຫຼວດວິສາຫະກິດ 2018). ແມ່ຍິງມີທ່າອ່ຽງທີ່ຈະປະກອບອາຊີບທີ່ບໍ່ໄດ້ຮັບຄ່າຈ້າງ ແລະໃນວຽກງານທີ່ບໍ່ເປັນທາງການ ແລະຊ່ອງວ່າງຂອງຄ່າຈ້າງກໍ່ຍັງຄົງຢູ່. ຊ່ອງວ່າງການຮູ້ໜັງສື ແລະ ການເຂົ້າໂຮງຮຽນລະຫວ່າງຜູ້ຊາຍ ແລະ ຜູ້ຍິງໄດ້ຫຼຸດລົງ ແຕ່ຍັງສືບຕໍ່ມີຢູ່ ເຊິ່ງແມ່ຍິງຈະຢູ່ໃນລະດັບຊັ້ນຕໍ່າກວ່າ. ແນວ ໃດກໍ່ຕາມ, ສປປ ລາວ ເປັນປະເທດທີ່ມີສະມາຊິກສະພາເພດຍິງສູງສຸດໃນໂລກ, 27,5% ຂອງຈໍານວນທັງໝົດ (ປີ 2017). |

| | | | |
|---|---|---|---|
| | **2. ປັບປຸງຄວາມສາມາດໃນການແຂ່ງຂັນ, ຄຸນນະພາບ ແລະ ມູນຄ່າຂອງຂະແໜງທຸລະກິດກະສິກຳ, ອຸດສາຫະກຳປຸງແຕ່ງ ແລະ ການບໍລິການ**<br>ໂດຍຜ່ານ:<br>• ມາດຕະການຊ່ວຍໜູນດ້ານຄຸນນະພາບ ແລະຜະລິດຕະພາບໃນລະດັບວິສາຫະກິດ SME<br>• ການປຶກສາຫາລືລະຫວ່າງ ພາກລັດ ແລະເອກະຊົນ ແລະ ມາດຕະການສະໜັບສະໜູນສະເພາະຂະແໜງ ການ<br>○ ທຸລະກິດການກະເສດ | • ເພີ່ມຂີດຄວາມສາມາດຂອງ SMEs ໃນການສະໜອງຜະລິດຕະພັນ ແລະ ການບໍລິການທີ່ໄດ້ຜ່ານການເລືອກເຟັ້ນ (ຜະລິດຕະພາບ ຂອງ SME)<br><br>• ຈຳນວນຄົນທຸກຍາກທີ່ມີລາຍໄດ້ເພີ່ມຂຶ້ນໂດຍຜ່ານໂຄງການພັດທະນາຕະຫຼາດ ແລະການປັບປຸງຜະລິດຕະພາບ<br><br>• ນັກທ່ອງທ່ຽວຕ່າງປະເທດມີຈຳນວນ ແລະມີການໃຊ້ຈ່າຍສະເລ່ຍຕໍ່ຫົວຄົນເພີ່ມຂຶ້ນ<br>• ການເຕີບໂຕ ຂອງຜະລິດຕະພາບທີ່ແທ້ຈິງໃນປີ (ການສຳຫລວດວິສາຫະກິດ) **(ES)**<br><br>• ການເຕີບໂຕຂອງຍອດຂາຍປະຈຳປີທີ່ແທ້ຈິງ **(ES)** | • ຄວາມສາມາດໃນການແຂ່ງຂັນຂອງ SME ໃນອຸດສາຫະກຳປຸງແຕ່ງໄດ້ຮັບການປັບປຸງດີຂຶ້ນຈາກປີ 2012 ແຕ່ໄດ້ຫຼຸດລົງໃນລະຫວ່າງປີ 2016 ຫາ 2018.<br><br>• ໃນຂະນະທີ່ອັດຕາຄວາມທຸກຍາກໃນທົ່ວປະເທດໄດ້ຫຼຸດລົງເປັນ 18,3% ໃນປີ 2018, ຈາກ 24,6% ໃນປີ 2012 (WB), ຜະລິດຕະພາບທີ່ໄດ້ເພີ່ມຂຶ້ນໃນອຸດສາ ຫະກຳປຸງແຕ່ງແມ່ນມີໜ້ອຍຫລາຍ ແລະ ຍັງບໍ່ທັນຈະແຈ້ງວ່າໂຄງການດັ່ງກ່າວໄດ້ປະກອບສ່ວນໂດຍກົງໄດ້ຫຼາຍປານໃດ.<br><br>• ຈຳນວນ, ການໃຊ້ຈ່າຍສະເລ່ຍ ແລະ ໄລຍະເວລາພັກເຊົາສະເລ່ຍຂອງນັກທ່ອງທ່ຽວຕ່າງປະເທດໄດ້ເພີ່ມຂຶ້ນຈາກ 471.867 ຄົນ, 81 ໂດລາ/ຄົນ/ມື້, ແລະ 7,2 ວັນໃນປີ 2012 ເປັນ 632.297 ຄົນ, 83,64 ໂດລາ/ຄົນ/ມື້, ແລະ 7,93 ມື້ໃນປີ 2019<br>• ມາດຕະການເພີ່ມຜະລິດຕະພາບໃນລະດັບວິສາຫະກິດສະແດງໃຫ້ເຫັນວ່າຜະລິດຕະພາບຂອງ SME ຍັງຄົງທີ່ ຫຼື ໄດ້ປັບປຸງເລັກນ້ອຍ. ວັດແທກເປັນເງິນໂດລາໃນປີ 2009, ເຫັນວ່າມູນຄ່າເພີ່ມຕໍ່ຄົນງານໃນອຸດສາຫະກຳປຸງແຕ່ງໄດ້ຫຼຸດລົງເລັກນ້ອຍຈາກ 2.922 ໃນປີ 2012 ເປັນ 2.869 ໃນປີ 2018, ແຕ່ຄ່າແຮງ |

| | | | |
|---|---|---|---|
| | ○ ການທ່ອງທ່ຽວ<br>○ ຫັດຖະກຳ ແຜ່ນແພ<br>○ ເຄື່ອງນຸ່ງຫົ່ມ<br>○ ການປຸງແຕ່ງໄມ້<br><br>• ອຸດສາຫະກຳທີ່ແຕກສາຂາອອກມາ ທີ່ພັດທະນາຈາກອຸດສາຫະກຳບໍ່ແຮ່ ແລະ ພະລັງງານໄຟຟ້ານ້ຳຕົກ | • ການຂະຫຍາຍຕົວຂອງການລົງ ທຶນໃນບາງຂະແໜງການທີ່ໄດ້ເລືອກເອົາ (ເຊັ່ນ: ຕັດຫຍິບ, ການປຸງແຕ່ງໄມ້, ການທ່ອງທ່ຽວ)<br><br>• ການເຕີບໂຕຂອງການຈ້າງງານຕົວຈິງປະຈຳປີ (ES)<br><br>• ອັດຕາຄວາມຢູ່ລອດເພີ່ມຂຶ້ນສຳລັບການຜະສົມຜະສານຜະລິດຕະພັນ-ປາຍທາງ-ຕະຫຼາດທີ່ມີຢູ່ແລ້ວ ແລະ ມີມາໃໝ່<br><br>• ຈຳນວນຄົນທີ່ມີວຽກເຮັດງານທຳໃນອຸດສາຫະກຳທີ່ແຕກສາຂາອອກມາຈາກການຂຸດຄົ້ນບໍ່ແຮ່ ແລະພະລັງ ງານໄຟຟ້ານ້ຳຕົກ ໂດຍໄດ້ຖືກແບ່ງອອກຕາມເງື່ອນໄຂມາດຖານຂອງຄວາມບອບບາງ. | ງານຕໍ່ຫົວໜ່ວຍໄດ້ຫຼຸດລົງຈາກ 0,43 ໃນປີ 2012 ເປັນ 0,37 ໃນປີ 2018 (0,30 ໃນປີ 2016).<br><br>• ຍອດຂາຍສະເລ່ຍແບບຄ່າກາງຕໍ່ຄົນງານເພີ່ມຂຶ້ນຈາກ 3.894 ໃນປີ 2012 ເປັນ 4.493 ໃນປີ 2018 (WB, ສິງຫາ 2019)<br>• ການທ່ອງທ່ຽວໄດ້ຮັບຄວາມສົນໃຈຈາກນັກລົງທຶນໃນຊຸມປີທີ່ຜ່ານມາ. ໃນລະຫວ່າງປີ 2003-2018, ໂຮງແຮມ ແລະ ການທ່ອງທ່ຽວກວມ **7%** ຂອງ FDI ປະເພດທີ່ບໍລິສັດແມ່ຢູ່ຕ່າງປະເທດມາຕັ້ງສາຂາແລະເລີ່ມກິດຈະການຈາກການປຸກສ້າງອາຄານສະຖານທີ່ ແລະ ລະບົບດຳເນີນງານຂຶ້ນມາໃໝ່ທັງໝົດ.<br><br>• ການຂາດຂໍ້ມູນຂ່າວສານ.<br><br>• ອັດຕາການຢູ່ລອດຂອງການສົ່ງອອກໄດ້ຮັບການປັບປຸງດີຂຶ້ນໂດຍການມີປະສົບປະການແລະເຄືອຂ່າຍທີ່ດີກວ່າເກົ່າ (ຮຽກຮ້ອງໃຫ້ມີຂໍ້ມູນຈາກພາສີໃນລະດັບວິສາຫະກິດ)<br><br>• ການຂາດຂໍ້ມູນຂ່າວສານ |

| | | | |
|---|---|---|---|
| | | | |
| | **3. ຂອບຂ່າຍການຄຸ້ມຄອງການຊ່ວຍເຫຼືອດ້ານການຄ້າ ເພື່ອເຊື່ອມສານການຄ້າ ແລະ ການພັດທະນາພາກເອກະຊົນເຂົ້າໃນກະແສລວມໄດ້ຮັບການປັບປຸງດີຂຶ້ນ**<br>ໂດຍຜ່ານ:<br>• ການເຊື່ອມສານວຽກງານຄວາມທຸກຍາກ, ບົດບາດຍິງ-ຊາຍ & ສິ່ງແວດລ້ອມເຂົ້າໃນກະແສລວມ<br>• ການພັດທະນາຂີດຄວາມສາມາດ | • ຄວາມທຸກຍາກ: ບົດບາດຂອງວຽກງານການຄ້າໃນການພັດທະນາ ແລະ ການຫຼຸດຜ່ອນຄວາມທຸກຍາກໄດ້ຖືກກ່າວເຖິງຢ່າງຈະແຈ້ງໃນ NSEDP ຄັ້ງທີ 8.<br>• ບົດບາດຍິງ-ຊາຍ: ຊັດສ່ວນຂອງທຸລະກິດທີ່ແມ່ຍິງເປັນເຈົ້າຂອງ ເພີ່ມຂຶ້ນ<br>• ສິ່ງແວດລ້ອມ: ແຜນງານໂຄງ ການສະໜັບສະໜູນດ້ານສິ່ງ ແວດລ້ອມໄດ້ຈັດຕັ້ງປະຕິບັດເພື່ອປະໂຫຍດຂອງທຸກຂະແໜງການສົ່ງອອກທີ່ສຳຄັນ | • NSEDP ຄັ້ງທີ 8 (2016-20) ບໍ່ໄດ້ລວມເອົາບົດບາດຂອງວຽກງານການຄ້າໃນການພັດທະນາ ແລະ ການຫຼຸດຜ່ອນຄວາມທຸກຍາກຢ່າງຊັດເຈນ.<br>• ຈຳນວນ ແລະ ພູດສ່ວນຂອງທຸລະກິດທີ່ດຳເນີນການໂດຍຜູ້ຍິງເພີ່ມຂຶ້ນຈາກ 39% ໃນປີ 2009 ເປັນ 42% ໃນປີ 2012 ແລະ ເປັນ 43% ໃນປີ 2016. ຂໍ້ມູນການຈົດທະບຽນທຸລະກິດຂອງ MOIC ຍັງເປີດເຜີຍວ່າ 46,8% ຂອງຈຳນວນ ການຂຶ້ນທະບຽນໃໝ່ 81.785 ຫົວໜ່ວຍ ສຳລັບການລົງທຶນພາຍໃນລະຫວ່າງປີ 2012 ຫາ 2020 ແມ່ນທຸລະກິດຍິງເປັນເຈົ້າຂອງ. (ຢ່າງໃດກໍຕາມ, ການສຳຫລວດວິສາຫະກິດ ຂອງ WB, ຊີ້ໃຫ້ເຫັນວ່າ ແມ່ຍິງມີສ່ວນຮ່ວມໃນການເປັນເຈົ້າຂອງທຸລະກິດແມ່ນມີເຖິງ 36% ໃນປີ 2018, ຕໍ່າກວ່າໃນອາຊີຕາເວັນອອກ ແລະ ປາຊີຟິກ (47%) ແຕ່ສູງກວ່າປະເທດທີ່ມີລາຍໄດ້ປານກາງຕໍ່າພຽງເລັກນ້ອຍ (35%). |

| | | | |
|---|---|---|---|
| | ຂອງກົງຈັກການຈັດຕັ້ງ<br>• ການພັດທະນາໜ່ວຍງານການປຶກສາຫາລື ຂອງຂະແໜງການ ແລະ ການເຊື່ອມສານວຽກງານການຄ້າເຂົ້າໃນກະແສຫລັກຂອງການວາງແຜນພັດທະນາແຫ່ງຊາດ<br>• ການຄ້າ ແລະ ຂອບຂ່າຍການຄຸ້ມຄອງການຊ່ວຍເຫຼືອດ້ານການຄ້າ ແລະ ການຈັດຕັ້ງປະຕິບັດ<br>• ການຕິດຕາມ ແລະ ປະເມີນຜົນ | • ການປະສານງານທີ່ເພີ່ມຂຶ້ນເຊິ່ງບົ່ງບອກດ້ວຍຈຳນວນກອງປະຊຸມບັນດາຄະນະກຳມະການໃນໂຄງປະກອບການຄຸ້ມຄອງບໍລິຫານຂອງ IF.<br>• ມູນຄ່າການຊ່ວຍເຫລືອທາງດ້ານການຄ້າ AfT ເພີ່ມຂຶ້ນຜ່ານຊອ່ງທາງ ຂອງ NIU ເຊິ່ງ ເປັນທັງຜູ້ປະສານງານ<br>• ອັດຕາສ່ວນຮ້ອຍ ຂອງທຸລະກິດທີ່ເຊື່ອວ່າຄວາມກັງວົນຂອງເຂົາເຈົ້າໄດ້ຮັບການແກ້ໄຂຢ່າງພຽງພໍໂດຍຜ່ານກົນໄກການປຶກສາຫາລືລະຫວ່າງພາກລັດ-ເອກະຊົນມີການເພີ່ມຂຶ້ນ .<br>• ແຜນງານພັດທະນາການຄ້າ ແລະ ພາກເອກະຊົນ/ ແຜນດຳເນີນງານໄດ້ຖືກສ້າງຂຶ້ນ ໂດຍມີທັງ ລະບົບ M&E ເຊິ່ງເປັນທີ່ຍອມຮັບ ແລະ ໄດ້ມີການທົບທວນຄືນໃນແຕ່ລະໄລຍະ | • ໂຄງການໄດ້ສຸມໃສ່ການປະຕິຮູບນະໂຍບາຍ ແລະ ທຶນສົມທົບແບບຊ່ວຍເຫຼືອລ້າເພື່ອສະໜັບສະໜູນວິສາຫະກິດເອກະຊົນໃນການປັບປຸງຄວາມສາມາດໃນການແຂ່ງຂັນຂອງເຂົາເຈົ້າ.<br>• ບັນດາຄະນະກຳມະການ ແລະ ໜ່ວຍງານປຶກສາຫາລືຂອງຂະແໜງການໃນໂຄງປະກອບການຄຸ້ມຄອງບໍລິຫານ ຂອງ IF ໄດ້ມີການຈັດປະຊຸມພົບປະກັນຕາມແຜນ ການທີ່ວາງໄວ້, ປະຈຳເດືອນ, ປະຈຳໄຕມາດ, ປະຈຳປີ ເຊິ່ງເຫັນວ່າຈຳເປັນສຳລັບແຕ່ລະອົງການທີ່ແຕກຕ່າງກັນ.<br>• ນັບຕັ້ງແຕ່ມີບົດ DTIS ປີ 2012, ໄດ້ປະຕິບັດ ສຳເລັດແລ້ວ 12 ໂຄງການ TRTA ທີ່ມີມູນຄ່າທັງໝົດ 78 ລ້ານໂດລາສະຫະລັດ ແລະ ປັດຈຸບັນກຳລັງປະຕິບັດຢູ່ມີ 14 ໂຄງການເຊິ່ງມີມູນຄ່າລວມ 75 ລ້ານໂດລາສະຫະລັດ.<br>• 16 ໂຄງການ<br>• ໄດ້ຖືກຮັບຮອງເອົາໃນປີ 2017 |

| | | | |
|---|---|---|---|
| **ການປ່ຽນແປງບໍລິບົດ (ສະພາບເງື່ອນໄຂແວດລ້ອມ)** | **ແງ່ມູມດ້ານສະພາບເງື່ອນໄຂແວດລ້ອມທີ່ຕ້ອງໄດ້ຕິດຕາມ** | • ແງ່ມູມດ້ານສະພາບເງື່ອນໄຂແວດລ້ອມຕົ້ນຕໍທາງດ້ານການເມືອງ/ສັງຄົມ/ເສດຖະກິດທີ່ກ່ຽວຂ້ອງກັບການພັດທະນາເສດຖະກິດ ແລະ ການຄ້າ<br>• ສະຖຽນລະພາບຂອງເສດຖະກິດມະຫາພາກ<br>• ການພັດທະນາບັນດາຂະແໜງການຊັບພະຍາກອນ (ການຂຸດຄົ້ນບໍ່ແຮ່ ແລະ ໄຟຟ້ານ້ຳຕົກ) | • ສປປ ລາວ ສືບຕໍ່ມີສະຖຽນລະພາບທາງດ້ານການເມືອງ ມີຄວາມປອງດອງທາງດ້ານສັງຄົມ ໂດຍມີອັດຕາອາດຊະຍາກຳຕ່ຳ. ລາຍໄດ້ຂອງຄົວເຮືອນໄດ້ເພີ່ມຂຶ້ນ, GNI/ຫົວຄົນເພີ່ມຂຶ້ນຈາກ 1.300 ໂດລາສະຫະລັດໃນປີ 2012 ເປັນ 2.570 ໂດລາສະຫະລັດໃນປີ 2019 ແລະ ອັດຕາຄວາມທຸກຍາກຫຼຸດລົງເປັນ 18,3% ໃນປີ 2018/19, ຈາກ 24,6% ໃນປີ 2012/13 (WB)<br>• ເສດຖະກິດມະຫາພາກຍັງສືບຕໍ່ຂ້ອນຂ້າງມີຄວາມໝັ້ນທ່ຽງໂດຍການດຳເນີນນະໂຍ ບາຍເງິນຕາ ແລະອັດຕາແລກປ່ຽນທີ່ເນັ້ນຄວາມມີສະຖຽນລະພາບຂອງລາຄາ.<br>• ຂະແໜງຊັບພະຍາກອນຍັງສືບຕໍ່ເປັນຂະແໜງຫລັກໃນການດຶງດູດການລົງທຶນ ແລະ ສ້າງລາຍໄດ້ຈາກສົ່ງອອກ ໂດຍສະເພາະພະລັງງານໄຟຟ້າ, ເຖິງແມ່ນວ່າການຂຸດຄົ້ນບໍ່ແຮ່ໄດ້ຫຼຸດລົງໃນຄວາມສຳຄັນແບບທຽບຖານຍ້ອນການຫັນປ່ຽນນະໂຍບາຍໄປສູ່ການຄຸ້ມຄອງດູແລປົກປັກຮັກສາການນຳໃຊ້ ແລະ ຄວາມຍືນຍົງທາງດ້ານສິ່ງ ແວດລ້ອມ ແລະ ສັງຄົມ. |

## ຕາຕະລາງ 2: ຂອບຂ່າຍການຕິດຕາມ ແລະ ປະເມີນຜົນ (M&E)

ເສົາຄໍ້າທີ 1: ສະພາບແວດລ້ອມທີ່ເອື້ອອຳນວຍໃຫ້ແກ່ການຄ້າ ແລະ ການລົງທຶນມີຄວາມເປັນທີ່ຍອມຮັບ

| | | |
|---|---|---|
| **ຜົນທີ່ໄດ້ອອກມາຂອງເສົາຄໍ້າ** | **ສະພາບແວດລ້ອມທີ່ເອື້ອອຳນວຍໃຫ້ແກ່ການຄ້າ ແລະ ການລົງທຶນພາຍໃນ ແລະ ຕ່າງປະເທດໄດ້ຖືກສ້າງຂຶ້ນ ໂດຍຜ່ານການສົ່ງເສີມການເຊື່ອມໂຍງການຄ້າກັບພາກພື້ນ ແລະ ສາກົນ; ການປັບປຸງການອຳນວຍຄວາມສະດວກທາງດ້ານການຄ້າ; SPS, TBT ແລະ ສະພາບແວດລ້ອມທີ່ເອື້ອອຳນວຍແກ່ການດຳເນີນທຸລະກິດ** | **ການທົບທວນສະຖານະການຈັດຕັ້ງປະຕິບັດ ແລະຜົນໄດ້ມາ (ຕັ້ງແຕ່ປີ 2012/13, ເວັ້ນເສຍແຕ່ໄດ້ລະບຸຢ່າງອື່ນ)** |
| **ຂົງເຂດການແກ້ໄຂບັນຫາ1.1** | 1. **ນະໂຍບາຍການຄ້າ: ການຈັດຕັ້ງປະຕິບັດ AEC, ແລະພາຍຫລັງການເຂົ້າເປັນສະມາຊິກຂອງ WTO**<br><br>**ການປ່ຽນແປງໃນລະດັບຜົນໄດ້ມາ:** ພັນທະຜູກພັນທາງກົດໝາຍ ແລະ ດ້ານອື່ນໆຕໍ່ກັບສັນຍາສາກົນເຊັ່ນວ່າ WTO ແລະ ອາຊຽນ ໄດ້ຮັບການປະຕິບັດ, ໂດຍໄດ້ຕັ້ງລະບົບການຊ່ວຍໜູນທີ່ໄດ້ປັບປຸງດີແລ້ວ ລວມທັງການຕິດຕາມ, ການສື່ສານ ແລະ ການສ້າງຂີດຄວາມສາມາດ.<br><br>**ຕົວຊີ້ວັດ:** | • ສປປ ລາວ ໄດ້ປັບປຸງພັນທະຜູກພັນຂອງຕົນຕໍ່ WTO ໂດຍການໃຫ້ສັດຕະຍາບັນສັນຍາການອຳນວຍຄວາມສະດວກທາງດ້ານການຄ້າໃນວັນທີ 29 ກັນຍາ 2015. ສປປ ລາວຍັງໄດ້ກ້າວສູ່ລວງເລິກໃນການມີພັນທະຜູກພັນຂອງຕົນໃນການເຊື່ອມໂຍງເສດຖະກິດກັບພາກພື້ນ ໂດຍຜ່ານການຈັດຕັ້ງປະຕິບັດ ແລະ/ຫຼື ການລົງນາມໃນສັນຍາອາຊຽນ. ເຖິງແມ້ວ່າໄດ້ມີຄວາມຄືບໜ້າ, ແຕ່ການແກ້ໄຂຫຼາຍອັນກໍ່ຍັງຄົງຢູ່ໃນໄລຍະກຳລັງປະຕິບັດ ແລະ ບາງອັນກໍ່ຍັງບໍ່ທັນໄດ້ຮັບການປະຕິບັດ.<br>• ການຈັດຕັ້ງປະຕິບັດ AEC ໄດ້ເລີ່ມມາແຕ່ປີ 2016 ແລະ ໄດ້ມີການປະເມີນເປັນແຕ່ລະປີ ແລະ ເປັນວຽກທີ່ພວມດຳເນີນຢູ່; DFTP, MOIC, ປັດຈຸບັນພວມພັດທະນາແຜນການ 2021-25 ເພື່ອຈັດຕັ້ງປະຕິບັດບັນດາພັນທະຜູກພັນຂອງ ແຜນງານ AEC. |

| | | |
|---|---|---|
| | • ລະດັບການຈັດຕັ້ງປະຕິບັດພັນທະຜູກພັນທີ່ໄດ້ມີໃນການເຈລະຈາການຄ້າສາກົນ, ໂດຍສະເພາະ WTO ແລະ AEC<br>• ກົດໝາຍໃໝ່ ແລະ ໂດຍສະເພາະດຳລັດການຈັດຕັ້ງປະຕິບັດ ຈຳນວນໜຶ່ງໄດ້ຖືກສ້າງຂຶ້ນ ແລະ ບັງຄັບໃຊ້<br>• ຄວາມຮູ້ ແລະ ຄວາມຕື່ນຕົວຂອງປະຊາຊົນ ແລະ ທຸລະກິດກ່ຽວກັບສິ່ງທ້າທາຍ ແລະ ໂອກາດຂອງການເຂົ້າເປັນສະມາຊິກ AEC ແລະ WTO ໄດ້ຮັບການຍົກສູງຂຶ້ນ (ການສຳຫຼວດວິສາຫະກິດ GIZ)<br>• ລະບົບການຕິດຕາມການຈັດຕັ້ງປະຕິບັດວຽກງານໃນການເຂົ້າເປັນສະມາຊິກ WTO, AEC ແລະສັນຍາການຄ້າສອງຝ່າຍອື່ນໆ ມີການເຄື່ອນໄຫວໄດ້ດີ, ເຊິ່ງຈະເປັນຂໍ້ມູນໃຫ້ແກ່ການສ້າງນະໂຍ ບາຍ ແລະ ການຈັດຕັ້ງປະຕິບັດນຳດ້ວຍ. | • ໄດ້ຈັດຕັ້ງກອງປະຊຸມເຜີຍແຜ່ຢ່າງກ້ວາງຂວາງກ່ຽວກັບກາລະໂອກາດ ແລະ ສິ່ງທ້າທາຍທີ່ຕິດພັນກັບການຈັດຕັ້ງປະຕິບັດບັນດາພັນທະຜູກພັນການເປັນພາຄີຂອງ WTO ແລະ AEC ທັງຢູ່ສູນກາງ ແລະ ທ້ອງຖິ່ນ, ເຊິ່ງເຮັດໃຫ້ເຂົ້າເຖິງບຸກຄົນທັງພາກລັດ ແລະ ເອກະຊົນ ແລະ ສະຖາບັນການສຶກສາໄດ້ຫລາຍກວ່າ 500 ຄົນ.<br>• ລະບົບການຕິດຕາມການຈັດຕັ້ງປະຕິບັດພັນທະຜູກພັນໄດ້ຮັບການສ້າງຂຶ້ນແລະລວມເຂົ້າໃນ NSCEI, LBF, ແລະ TPSWG. |

| 1.1 **ການແກ້ໄຂບັນຫາ** | ອົງການ | ການໃຫ້ທຶນ/ໂຄງການ | **ຜົນໄດ້ມາ ໃນປີ 2021 (ການຈັດຕັ້ງປະຕິບັດນັບແຕ່ 2012/13)** |
|---|---|---|---|
| 1 ການໃຊ້ປະໂຫຍດຈາກການເຂົ້າເປັນສະ ມາຊິກ WTO ແລະ ອາຊຽນ ເພື່ອສະ ໜັບສະໜູນໂຄງການປະຕິຮູບພາຍໃນປະເທດ ເຊິ່ງເນັ້ນໜັກເຖິງການແຂ່ງຂັນ, ລະ ບຽບການ ແລະ ນະໂຍບາຍທີ່ດີ ເພື່ອເປີດກວ້າງການເຂົ້າເຖິງການບໍລິການໃນຂະແໜງການບໍລິການທີ່ສຳຄັນເຊັ່ນ: ການເງິນ, ໂທລະຄົມມະນາຄົມ ແລະ ຂະແໜງການຂົນສົ່ງ. | DFTP, MOIC ແລະ ອົງການທີ່ກ່ຽວຂ້ອງ | TDF II, GIZ, LUNA | ສຳເລັດບາງສ່ວນ. DFTP, MOIC, ເຊິ່ງມີໜ້າທີ່ໃຫ້ຂໍ້ສະເໜີແນະ, ໄດ້ລາຍງານວ່າ ວຽກງານແມ່ນໄດ້ສຳເລັດໄປແລ້ວໃນປີ 2013 ດ້ວຍການເຂົ້າເປັນສະມາຊິກ WTO ລວມມີການຍົກເລີກ “ລາຄາກາງ” ສຳລັບການນຳເຂົ້າ; ການສ້າງຕັ້ງອົງການຄຸ້ມຄອງໂທລະຄົມທີ່ແຍກຕ່າງຫາກຈາກກົມກອງທີ່ວາງນະໂຍບາຍ, ສິດທິທາງດ້ານການຄ້າ (DFTP ເປັນຜູ້ເລີ່ມຕົ້ນ ແລະ DIMEX ເປັນຜູ້ເຮັດໃຫ້ສຳເລັດ), ກົດໝາຍວ່າດ້ວຍປົກປ້ອງຜູ້ຜະລິດທີ່ໄດ້ຮັບຜົນກະທົບຈາກການນຳເຂົ້າສິນຄ້າ, ກົດໝາຍວ່າດ້ວຍການຕອບໂຕ້ການທຸ້ມຕະຫລາດ ແລະ ການຊ່ວຍໜູນຂອງປະເທດຜູ້ສົ່ງອອກ ແລະ ການທົບທວນນະໂຍບາຍການຄ້າ. |
| 2 ເພີ່ມທະວີຄວາມຮັບຮູ້ຂອງພາກລັດ ແລະ ທຸລະກິດກ່ຽວກັບກາລະໂອກາດ ແລະ ສິ່ງທ້າທາຍທີ່ເກີດຈາກການເຂົ້າເປັນສະມາຊິກ WTO, AEC ແລະ | MOIC ແລະ ອົງ | TDF II | ຈັດຕັ້ງປະຕິບັດໄດ້ບາງສ່ວນ. DFTP, MOIC, ເຊິ່ງມີໜ້າທີ່ໃນການສະເໜີຂໍ້ແນະນຳ, ໄດ້ຈັດກອງປະຊຸມສຳມະນາທັງຢູ່ນະຄອນຫຼວງວຽງຈັນ (ຂັ້ນສູນກາງ) ແລະ ບັນດາແຂວງ (ຂັ້ນທ້ອງຖິ່ນ), ຈັດພິມແຜ່ນພັບ ແລະ ແຈກຢາຍ |

| | | | | |
|---|---|---|---|---|
| | ການປະຕິບັດສັນຍາການຄ້າອື່ນໆ ໂດຍຜ່ານການພິມຈຳໜ່າຍປຶ້ມຄູ່ມື ແນະນຳ, ໃບຖະແຫຼງຂ່າວ ແລະ ກອງປະຊຸມສຳມະນາ. | ການທີ່ ກ່ຽວຂ້ອງ | | ຢູ່ໃນເວັບໄຊທີ່ຄຸ້ມຄອງໂດຍ MOIC ລວມທັງຂອງ ບັນດາສະພາການຄ້າ ແລະໄດ້ໄປສະເໜີກ່ຽວກັບບັນຫາຕ່າງໆເຫລົ່ານີ້ຢູ່ໃນກອງປະຊຸມແລະສຳມະນາ ຕ່າງໆໃນຖານະເປັນວິທະຍາກອນ. ກອງປະຊຸມເຜີຍແຜ່ເພື່ອໃຫ້ຫລາຍ ພາກສ່ວນຮູ້ ບາງຄັ້ງແມ່ນໄດ້ຖືກຈັດຂຶ້ນໂດຍການຊ່ວຍເຫຼືອ ຂອງ LUNA II ຂອງ USAID. |
| 3 | ປັບປຸງລະບົບການຕິດຕາມ ແລະ ກວດກາຄວາມຄືບໜ້າຂອງການຈັດຕັ້ງ ປະຕິບັດບັນດາມາດຕະການຂອງ AEC ແລະ WTO ໂດຍຈັດກອງ ປະຊຸມປຶກສາຫາລືລະຫວ່າງບັນດາ ພາກສ່ວນກ່ຽວຂ້ອງທັງພາກລັດ ແລະ ເອກະຊົນ ສຳລັບແຕ່ລະມາດຕະການ ຫຼັກ ເພື່ອຮັບປະກັນໃຫ້ມີຂໍ້ມູນຍ້ອນກັບ ຢ່າງເປັນປົກກະຕິ. ນອກນີ້, ຄວາມຄືບ ໜ້າລວມຂອງການຈັດຕັ້ງປະຕິບັດ ແຜນງານ AEC (blueprint) ຄວນ ໄດ້ຮັບການເຜີຍແຜ່ໃຫ້ປະຊາຊົນໄດ້ຮັບ ຮູ້ຢ່າງທັນການ. | DFTP, MOIC | TDF II | ຄະນະກຳມະການປະສານງານລະດັບຊາດ ວ່າດ້ວຍການເຊື່ອມໂຍງ ເສດຖະກິດກັບສາກົນ (NSCEI) ແມ່ນກົນໄກສຳຄັນໃນການຕິດຕາມ ແລະ ກວດກາຄວາມຄືບໜ້າຂອງການຈັດຕັ້ງປະຕິບັດບັນດາມາດຕະການ ຂອງ AEC ແລະ WTO. ພາລະບົດບາດດັ່ງກ່າວແມ່ນໄດ້ຫັນໄປໃຫ້ກອງປະຊຸມ ທຸລະກິດຂອງພາກເອກະຊົນທີ່ຈັດຂຶ້ນໃນແຕ່ລະປີ. ເພື່ອເປັນການເຜີຍແຜ່ ຄວາມຄືບໜ້າຢ່າງທັນການ, ໄດ້ຈັດກອງປະຊຸມສຳມະນາຢູ່ບັນດາແຂວງໃນທັງ ໝົດ 3 ພາກ ແລະ ໄດ້ເຜີຍແຜ່ຄວາມຄືບໜ້າການຈັດຕັ້ງປະຕິບັດແຜນງານ AEC (blueprint) ໃນເວັບໄຊ MOIC (http://www.moic.gov.la/?lang=en). |

| | | | | |
|---|---|---|---|---|
| 4 | ສືບຕໍ່ປັບປຸງໃໝ່ຫຼືສ້າງກົດໝາຍທີ່ຈຳເປັນແລະລະບຽບການຈັດຕັ້ງປະຕິບັດ (ລວມທັງແຕ່ບໍ່ຈຳກັດແຕ່<br>• ປັບປຸງກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ, ກົດໝາຍວ່າດ້ວຍມາດຕະຖານ, ກົດໝາຍວ່າດ້ວຍພາສີ<br>• ສ້າງກົດໝາຍວ່າດ້ວຍການແຂ່ງ ຂັນທາງທຸລະກິດ, ກົດໝາຍວ່າດ້ວຍການສ້າງກົດໝາຍ;<br>• ການຈັດຕັ້ງປະຕິບັດລະບຽບການ ທີ່ກ່ຽວກັບກົດໝາຍວ່າດ້ວຍ SME, ກົດໝາຍສະບັບໃໝ່ວ່າດ້ວຍສ່ວຍສາອາກອນ<br>ຄວນມີການພັດທະນາຂີດຄວາມສາມາດຂອງບັນດາສະຖາບັນທີ່ກ່ຽວຂ້ອງ ໃຫ້ມີປະສິດທິຜົນໃນການປະຕິບັດໜ້າທີ່ ແລະ ການສ້າງຈິດສຳນຶກຂອງປະຊາຊົນໃນສິ່ງທີ່ກ່າວມາຂ້າງ | MOIC ແລະ ອົງການ ກ່ຽວຂ້ອງ | | ນິຕິກຳທັງໝົດເຫຼົ່ານີ້ໄດ້ຖືກສ້າງຂຶ້ນ. ຢ່າງໃດກໍ່ຕາມ, ເຫັນວ່າຍັງຂາດການສ້າງຂີດຄວາມສາມາດດ້ານການຈັດຕັ້ງ, ເຮັດໃຫ້ການຈັດຕັ້ງປະຕິບັດຍັງບໍ່ທັນໄດ້ດີ.<br><br>ໂຄງການ LUNA II ຂອງອົງການ USAID ໄດ້ໃຫ້ການສະໜັບສະໜູນດ້ານວິຊາການ ເພື່ອຍົກສູງຂີດຄວາມສາມາດຂອງ MOJ, MOIC ແລະບັນດາກະຊວງ/ອົງການຂອງລັດຖະບານທີ່ກ່ຽວຂ້ອງກັບການສ້າງກົດໝາຍ, ເຮັດໃຫ້ການສ້າງກົດໝາຍກວມລວມເອົາຫລາຍຢ່າງກວ່າເກົ່າໂດຍມີຈົດໝາຍເຫດທາງການຜ່ານທາງເອເລັກໂຕຣນິກ, ເຮັດໃຫ້ປະຊາຊົນທົ່ວໂລກສາມາດ ເຂົ້າເຖິງກົດໝາຍຂອງລາວໄດ້.<br><br>ໃນເດືອນມິຖຸນາ 2014, ໂຄງການ LUNA II ຂອງ USAID, ໄດ້ສົ່ງເຈົ້າໜ້າທີ່ສາມຄົນເຂົ້າຮ່ວມກອງປະຊຸມສຳມະນາຂອງອົງການສິດທິບັດແລະເຄື່ອງໝາຍການຄ້າຂອງສະຫະລັດກ່ຽວກັບການຄຸ້ມຄອງ IP ສຳລັບສະມາຊິກອາຊຽນ ທີ່ ກຸງວໍຊິງຕັນ ດີຊີ. ໂຄງການໄດ້ເຮັດວຽກຮ່ວມກັບ ສານປະຊາ ຊົນສູງສຸດ (SPC) ໃນການຮ່າງຄຳແນະນຳການບັງຄັບໃຊ້ IP ທີ່ຕອບສະໜອງຂໍ້ກຳນົດຂອງ TRIPS (ຊັບສິນທາງປັນຍາທີ່ກ່ຽວຂ້ອງກັບສິດທິທາງການຄ້າ ພາຍໃຕ້ WTO). ໂຄງການດັ່ງກ່າວຍັງໄດ້ສົ່ງເຈົ້າໜ້າທີ່ |

| | | | | |
|---|---|---|---|---|
| | ເທື່ອນີ້ ແລະ ເຊັ່ນດຽວກັບໃນການສະໜັບສະໜູນນິຕິກຳ ແລະ ລະບຽບການທີ່ໄດ້ຮັບການປັບປຸງເມື່ອບໍ່ດົນມານີ້ ໂດຍເປັນສ່ວນໜຶ່ງຂອງຂະບວນການເຂົ້າເປັນສະມາຊິກ WTO, ລວມທັງການຝຶກອົບຮົມດ້ານຕຸລາການໃນຂົງເຂດຕ່າງໆ ເຊັ່ນ ຊັບສິນທາງປັນຍາ (IP). | | | ຈາກສານປະຊາຊົນສູງສຸດ (SPC) ແລະ ກະຊວງ MOST ໄປທັດສະນະສຶກສາຢູ່ຟີລິບປິນ ກ່ຽວກັບຮູບແບບການບັງຄັບໃຊ້ຂອງບັນດາປະເທດສະມາຊິກ ອື່ນໆຂອງ WTO. |
| 5 | ເພີ່ມທະວີການປະສານສົມທົບລະຫວ່າງກະຊວງ ແລະ ພາຍໃນກະຊວງໃນການເຈລະຈາການຄ້າ ແລະ ການຈັດຕັ້ງປະຕິບັດ. ສິ່ງນີ້ອາດລວມເຖິງການປະຕິຮູບໂຄງສ້າງ NSCEI ໃນປັດຈຸບັນ ໂດຍໃຫ້ກອງເລຂາການເຂົ້າເປັນສະມາຊິກຂອງ WTO ກາຍເປັນກອງເລຂານະໂຍ ບາຍການຄ້າໃນຄວາມໝາຍກວ້າງໆ (ລວມທັງບັນຫາທີ່ກ່ຽວຂ້ອງເຖິງ AEC). ສິ່ງສຳຄັນແມ່ນການຕັ້ງໜ້າແກ້ໄຂການບໍ່ຈັດຕັ້ງປະຕິບັດບັນດາພັນທະຜູກພັນກັບ | DPM, MOIC | | ກອງເລຂາການເຂົ້າເປັນສະມາຊິກ WTO ໄດ້ຖືກລວມເຂົ້າເປັນ NSCEI ເພື່ອສຸມໃສ່ການປະຕິຮູບດ້ານລະບຽບກົດໝາຍທີ່ຈຳເປັນເພື່ອຈັດຕັ້ງປະຕິບັດບັນດາພັນທະສັນຍາການເຂົ້າເປັນສະມາຊິກ WTO. NSCEI ມີບັນດາຮອງລັດຖະມົນຕີຈາກກະຊວງທີ່ກ່ຽວຂ້ອງ ເປັນສະມາຊິກຕົ້ນຕໍ, ໂດຍການເປັນປະທານຂອງທ່ານຮອງນາຍົກລັດຖະມົນຕີ. ພາຍໃຕ້ໂຄງສ້າງນີ້, ກະຊວງສາມາດຮຽກໂຮມກອງປະຊຸມ. ບັດນີ້, ກະຊວງສາມາດຈະຮຽກເຊີນປະຊຸມແລະຫົວໜ້າກົມກໍ່ສາມາດແຈ້ງເຊີນປະຊຸມໄດ້ຕາມຄວາມຈຳເປັນເພື່ອປັບປຸງຄວາມເໝາະສົມດ້ານເວລາຂອງບັນຫາທີ່ຈະປຶກສາຫາລືແລະທັງໄດ້ເຜື່ອເອົາໄວ້ເພື່ອໃຫ້ມີການເພີ່ມວາລະອື່ນເຂົ້າໄດ້ຕື່ມ. |

| | | | | |
|---|---|---|---|---|
| | ສາກົນ ແລະ ພາກພື້ນ ໂດຍຜ່ານການເພີ່ມທະວີກົນໄກປະສານງານລະຫວ່າງບັນດາກະຊວງຂະແໜງການ, ການສ້າງຂີດຄວາມສາມາດທີ່ຈຳເປັນ, ການນຳເອົາຂະບວນການທົບທວນໂດຍມີຜູ້ທີ່ຮູ້ເທົ່າກັນຊ່ວຍກວດກາໃຫ້ຕື່ມ ແລະການນຳໃຊ້ກົນໄກແກ້ໄຂຂໍ້ຂັດແຍ່ງເພື່ອແກ້ໄຂບັນຫາໂດຍວິທີທີ່ອີງໃສ່ກົດກະຕິກາສັນຍາ. | | | |
| 6 | ສ້າງ ແລະ ຈັດຕັ້ງປະຕິບັດບັນດາລະບຽບການກ່ຽວກັບການຢັ້ງຢືນແຫຼ່ງກຳເນີດສິນ ຄ້າດ້ວຍຕົນເອງພາຍໃຕ້ຂອບຂ່າຍຂອງ AFTA. | DIMEX, MOIC | | DIMEX ໄດ້ເຮັດສຳເລັດການຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງຂອງທົ່ວອາຊຽນ (AWSC) ໃນເດືອນທັນວາ 2020. ແນວໃດກໍ່ຕາມ, ບາງທຸລະກິດກໍ່ຍັງບໍ່ຕ້ອງການການຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ. ກ່ຽວກັບແບບຟອມ D ທາງເອເລັກໂຕຣນິກ, DIMEX ໄດ້ແຈ້ງໃຫ້ຊາບວ່າ ໄດ້ມີການຈັດຕັ້ງປະຕິບັດແລ້ວ (ໃນການແລກປ່ຽນຂໍ້ມູນຂ່າວສານກັບບັນດາປະເທດສະມາຊິກອາຊຽນອື່ນໆ) ຕັ້ງແຕ່ເດືອນທັນວາ 2019. ແນວໃດກໍ່ຕາມ, ບາງທຸລະກິດເອກະຊົນຍັງມັກແບບສະບັບເປັນເຈ້ຍ. ດັ່ງ ນັ້ນ, ຄວາມຕ້ອງການການຊ່ວຍເຫຼືອດ້ານວິຊາການ ແລະການສ້າງຂີດຄວາມສາມາດຈຶ່ງປາກົດວ່າມີຢູ່. |

| | | | | |
|---|---|---|---|---|
| 7 | ເຮັດໃຫ້ການເຈລະຈາສອງຝ່າຍມີຄວາມສົມເຫດສົມຜົນໂດຍອີງໃສ່ທ່າແຮງຂອງກາລະໂອກາດໃນການເຂົ້າເຖິງຕະຫຼາດ ຂອງຜະລິດຕະພັນສິນຄ້າລາວ ແລະ ການສ້າງກົນໄກການປະສານງານກັບຄູ່ຄ້າລາຍໃຫຍ່ທັງໃນລະດັບສູນກາງ ແລະ ທ້ອງຖິ່ນເພື່ອອຳນວຍຄວາມສະດວກໃຫ້ແກ່ການປຶກສາຫາລືກ່ຽວກັບມາດຕະການການສົ່ງເສີມການຄ້າ ແລະ ການແກ້ໄຂຂໍ້ຂັດແຍ່ງ. | ETCD, DPC, MOIC | | ພະແນກຮ່ວມມືເສດຖະກິດການຄ້າກັບຕ່າງປະເທດ, ກົມແຜນການ ແລະ ການຮ່ວມມື MOIC ໃຫ້ຮູ້ວ່າ, ການຮ່ວມມືດ້ານການຄ້າກັບຈີນນັບມື້ນັບເພີ່ມຂຶ້ນ, ການຮ່ວມມືກັບຫວຽດນາມ ແລະ ໄທ ກໍ່ສືບຕໍ່ດຳເນີນໄປ.<br><br>ກັບຈີນ ແມ່ນມີແຜນການຮ່ວມມື ດັ່ງນີ້: 1) ການພັດທະນາເຂດອຸດສາຫະກຳ; 2) ສູນມາດຕະຖານ; 3) ເຂດການຄ້າເສລີ; 4) ງານວາງສະແດງສິນຄ້າສຳລັບ SME; 5) ສ້າງຄວາມເຂັ້ມແຂງການຄ້າໂດຍຜ່ານການຄ້າທາງເອເລັກໂຕຣນິກ; 6) ປັບປຸງສະພາບແວດລ້ອມທາງທຸລະກິດ; ແລະ 7) ICT ສຳລັບການຄ້າ. ICT ແລະ ລະບົບຄຸ້ມຄອງເອກະສານດ້ວຍລະບົບຄອມພິວເຕີ້ (e-filing) ແມ່ນໄດ້ກຳລັງຖືກຈັດຕັ້ງປະຕິບັດແລະເປັນບຸລິມະສິດໃນປັດຈຸບັນ. ໃນຂອບການຮ່ວມມືແມ່ນ້ຳຂອງ-ແມ່ນ້ຳລ້ານຊ້າງ, ແມ່ນກຳລັງສ້າງແຜນການຮ່ວມມື 5 ປີ ເພື່ອໃຫ້ສຳເລັດ ແລະ ໃຫ້ໄດ້ເລີ່ມຈັດຕັ້ງປະຕິບັດໃນປີ 2021.<br><br>ກັບຫວຽດນາມ, ສປປ ລາວ ມີສັນຍາການຄ້າຊາຍແດນ, ໂດຍມີເຂດຄວບຄຸມຮ່ວມກັນ - ເພື່ອຫຼີກເວັ້ນການກວດກາຊ້ຳຊ້ອນຢູ່ໃນດ່ານຊາຍແດນຂອງແຕ່ລະປະເທດ. ໄດ້ຈັດກອງປະຊຸມກ່ຽວກັບການຄ້າຊາຍແດນໄດ້ 11 ຄັ້ງ; ປີ 2020 ແມ່ນໄດ້ຖືກເລື່ອນອອກໄປເນື່ອງຈາກພະຍາດໂຄວິດ-19 ແລະ ກອງປະຊຸມໃນປີ 2021 ແມ່ນຈະຈັດເປັນແບບປະຊຸມທາງໄກ. ການຮ່ວມມືກັບຫວຽດນາມ |

| | | | |
|---|---|---|---|
| | | | ໂດຍມີຄະນະກຳມະການຮ່ວມມືຢູ່ MPI, ຕົ້ນຕໍແມ່ນດ້ານສາທາລະນະສຸກ, ການສຶກສາ, ການຂົນສົ່ງ, ບໍ່ແຮ່ ແລະ ໄຟຟ້າ.<br><br>ກັບໄທ ແມ່ນໄດ້ສ້າງແຜນການຮ່ວມມືຍຸດທະສາດ ແລະ ໄດ້ພິຈາລະນາທັນເປັນໂຄງການຮ່ວມມື. ເມື່ອກ່ອນເຮັດວຽກນຳກັນແບບເປັນປີຕໍ່ປີ, ແຕ່ບັດນີ້ແມ່ນມີແຜນການ 3 ປີ. ແຜນການຮ່ວມມື 2021-23 ລວມມີ: 1) ການພັດທະນາຜະລິດຕະພັນສິນຄ້າ; 2) ການເພີ່ມມູນຄ່າໃຫ້ຜະລິດຕະພັນກະເສດ; 3) ການສ້າງຂີດຄວາມສາມາດເລື່ອງການຜ່ານແດນພາສີ - ວິທີການອຳນວຍຄວາມສະດວກໃນການນຳເຂົ້າ-ສົ່ງອອກ, ການຜ່ານແດນ ແລະ ເຄື່ອນຍ້າຍຂອງສິນຄ້າ, ເພີ່ມທະວີຄວາມໂປ່ງໃສ ແລະ ອື່ນໆ, ຄະນະກຳມະການລາວ-ໄທ ໄດ້ປະຊຸມກັນປະຈຳປີເພື່ອປຶກສາຫາລືກ່ຽວກັບບັນຫາການຄ້າ. |
| 8 ພິຈາລະນາປັບປຸງກົງຈັກການຈັດຕັ້ງຂັ້ນພະແນກໃນກົມນະໂຍບາຍການຄ້າຕ່າງປະເທດຄືນໃໝ່ຕາມສາຍພາລະບົດບາດໜ້າທີ່ຕ່າງໆ (ການຄ້າສິນຄ້າ, ການຄ້າການບໍລິການ, ລະບຽບແຫຼ່ງກຳເນີດສິນຄ້າ ແລະ ອື່ນໆ...) ເພື່ອເຮັດໃຫ້ການປະສານງານໃນການເຈລະຈາການຄ້າດີຂຶ້ນ. | DFTP, MOIC | TDF II | DFTP ໄດ້ຈັດຕັ້ງກົງຈັກພະແນກຕາມສາຍພາລະບົດບາດ, ໄດ້ທັນທິດບັນດາໜ່ວຍງານມາຈັດຕັ້ງຄືນ ໃໝ່ຕາມພາລະບົດບາດໜ້າທີ່ຂອງຂະແໜງການ - ການຄ້າທາງເອເລັກໂຕຣນິກ, WTO ແລະອື່ນໆ. ດ້ວຍການລວມຕົວ, ປັດຈຸບັນມີ 5 ພະແນກ, ຫຼຸດລົງຈາກ 6; ແຕ່ລະພະແນກ ແລະ ໜ່ວຍງານພາຍໃນພະແນກມີຄຳບັນຍາຍວຽກງານທີ່ຮັບຜິດຊອບທີ່ຊັດເຈນກວ່າ. DFTP ມີບຸກຄະລາກອນ 29 ຄົນ, ເຊິ່ງບໍ່ພຽງພໍກັບບັນດາຄວາມຮັບຜິດຊອບທັງໝົດ; |

| | | | |
|---|---|---|---|
| | | | ຂາດບຸກຄະລາກອນໃນວຽກງານທີ່ລົງເລິກສະເພາະ, ລວມທັງກົດໝາຍການຄ້າສາກົນ, ການຄົ້ນຄ້ວາເສດຖະກິດ ແລະ ການພັດທະນາແຜນຍຸດທະສາດ. |
| | **2. ສະພາບແວດລ້ອມທາງທຸລະກິດ**<br>**ການປ່ຽນແປງໃນລະດັບຜົນໄດ້ຮັບ:** ສະພາບແວດລ້ອມທາງທຸລະກິດທີ່ມີໂອກາດເທົ່າທຽມກັນສຳລັບທຸລະກິດທັງໝົດ ໄດ້ຮັບການເພີ່ມພູນຄູນສ້າງ ແລະ ການປົກປ້ອງຜູ້ຊົມໃຊ້ ກໍ່ໄດ້ຖືກປັບປຸງດີຂຶ້ນ<br>**ຕົວຊີ້ວັດ:**<br>A. ອັດຕາການເຂົ້າສູ່ທຸລະກິດໃໝ່ເພີ່ມຂຶ້ນ<br>B. % SMEs ທີ່ມີການເຂົ້າເຖິງເງິນກູ້ທະນາຄານຢ່າງເປັນທາງການ (% ແມ່ຍິງເປັນເຈົ້າຂອງ) (ES)<br>C. ການຫຼຸດລົງໃນອັດຕາສ່ວນຮ້ອຍຂອງວິສາຫະກິດທີ່ເນັ້ນໃສ່ການເຂົ້າເຖິງແຮງງານທີ່ມີທັກສະ ເປັນໜຶ່ງໃນສາມຂໍ້ຈຳກັດສູງສຸດຂອງພວກເຂົາ (WB ES).<br>D. ລະບອບສ່ວຍສາອາກອນແບບງ່າຍດາຍສຳລັບ SMEs ໄດ້ຖືກນຳມາໃຊ້; ການເພີ່ມຂຶ້ນຂອງຈຳ | | II. ການຂຶ້ນທະບຽນທຸລະກິດໃໝ່ນຳ MOIC ໄດ້ເພີ່ມຂຶ້ນທັງໝົດ 90.160 ຫົວໜ່ວຍ ໃນໄລຍະປີ 2013-20 ແລະໃນນັ້ນ 45,4% ແມ່ນແມ່ຍິງເປັນເຈົ້າຂອງ (46,8% ຖ້າເອົາແຕ່ການລົງທຶນພາຍໃນຢ່າງດຽວ). ຈຳນວນການຂຶ້ນທະບຽນໄດ້ເພີ່ມຂຶ້ນເທື່ອລະກ້າວຈາກ 10.000+ ເປັນ 11.000+ ຕໍ່ປີ (ສະເລ່ຍ 11.167 ຫົວໜ່ວຍຕໍ່ປີໃນໄລຍະ 2013-18) ແລະກະໂດດຂຶ້ນເປັນ 15.101 ຫົວໜ່ວຍໃນປີ 2019 ແຕ່ຕົກລົງເປັນ 8.060 ຫົວໜ່ວຍໃນປີ 2020 ເນື່ອງຈາກຜົນກະທົບຈາກພະຍາດໂຄວິດ-19.<br>**III.** ໃນປີ 2018, 20% ຂອງວິສາຫະກິດຂະໜາດນ້ອຍ (ພະນັກງານ 5-19 ຄົນ) ໄດ້ເຂົ້າເຖິງເງິນກູ້ທະນາຄານ, ໃນຂະນະທີ່ 45% ຂອງວິສາຫະກິດຂະໜາດກາງ (ພະນັກງານ 20-99 ຄົນ) ແລະ 80% ຂອງວິສາຫະກິດຂະໜາດໃຫຍ່ (ພະນັກງານ 100+ ຄົນ) ໄດ້ເຂົ້າເຖິງເງິນກູ້ທະນາຄານ (WB ES. 2018). ໃນ ສປປ ລາວ, ທະນາຄານຈັດຫາທຶນໃຫ້ແກ່ ຂອງການລົງທຶນໃນຊັບສິນຄົງທີ່ ມີພຽງແຕ່ 6% ເທົ່ານັ້ນ, ໃນຂະນະທີ່ ຢູ່ໃນອາຊີຕາເວັນອອກ ແລະ ປາຊີຟິກແມ່ນ 10% ແລະ 13% ໃນປະເທດທີ່ມີລາຍໄດ້ປານກາງຕ່ຳ (WB ES 2018). |

| | | |
|---|---|---|
| | ນວນວິສາຫະກິດທີ່ຊຳລະອາກອນໂດຍອີງໃສ່ກົດລະບຽບການບັນຊີ<br>E. ການແກ້ໄຂຂໍ້ຂັດແຍ່ງຮູບແບບອື່ນມີປະສິດທິພາບຫລາຍຂຶ້ນ<br>F. ຮັບປະກັນຄວາມເປັນທຳໃນການແຂ່ງຂັນໃຫ້ທຸກວິສາຫະກິດໃນດ້ານໂອກາດປະສົບຜົນສຳເລັດ ແລະ ຄວາມສະເໝີພາບຕໍ່ໜ້າກົດໝາຍ, ໂດຍສະເພາະແມ່ນໃນຂະແໜງການບໍລິການຕົ້ນຕໍ, ໂດຍໃຫ້ອີງການຄຸ້ມຄອງມີຄວາມເປັນອິດສະຫລະຈາກຜູ້ວາງນະໂຍບາຍ ແລະ ມີປະສິດທິຜົນເພີ່ມຂຶ້ນ.<br>G. ການເພີ່ມຂຶ້ນ ຂອງຈຳນວນບັນຫາດ້ານສະພາບແວດລ້ອມທາງທຸລະກິດໄດ້ຮັບການແກ້ໄຂໂດຍຜ່ານ PPD<br>H. ການເພີ່ມຂຶ້ນໃນດ້ານຂໍ້ລິເລີ່ມການພັດທະນາສີມືແຮງງານທີ່ອີງໃສ່ຄວາມຕ້ອງການເປັນຕົວກຳນົດພາຍໃຕ້ PPP)<br>I. ປັບປຸງການເຂົ້າເຖິງຂໍ້ມູນຂ່າວສານຂອງ SMEs | |

| 1.2 ການແກ້ໄຂບັນຫາ | ອົງການ | ການໃຫ້ທຶນ/ໂຄງການ | ຜົນໄດ້ມາ ໃນປີ 2021 (ການຈັດຕັ້ງປະຕິບັດນັບແຕ່ 2012/13) |
|---|---|---|---|
| 1 ຫລຸດຂັ້ນຂອດດ້ານລະບຽບການກ່ຽວກັບການເຂົ້າມາສູ່ວົງການໃໝ່ທາງດ້ານທຸລະກິດ ໃຫ້ແກ່ນັກລົງທຶນທັງພາຍໃນ ແລະ ຕ່າງປະເທດເພີ່ມຕື່ມ ໂດຍຜ່ານການຈັດ ຕັ້ງປະຕິບັດກົດໝາຍວ່າດ້ວຍວິສາຫະກິດ ແລະ ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນຢ່າງເຕັມສ່ວນ. | MOIC ແລະ MPI | | ກົດໝາຍວ່າດ້ວຍວິສາຫະກິດ ປີ 2013 ແລະ ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ສະບັບປັບປຸງປີ 2016 ຖືວ່າຄຸ້ມຄອງທຸກການເຄື່ອນໄຫວທຸລະກິດຢູ່ ສປປ ລາວ |
| 2 ຫຼຸດຜ່ອນຊ່ອງວ່າງລະຫວ່າງກົດໝາຍ, ລະບຽບການ ແລະ ການຈັດຕັ້ງປະຕິບັດ ໂດຍລວມເອົາ ພາກປະຕິບັດທີ່ດີໃນຂະບວນການສ້າງກົດໝາຍເຂົ້າໄປໃນກົດ ໝາຍວ່າດ້ວຍການສ້າງກົດໝາຍທີ່ພວມກະກຽມ ແລະ ສ້າງກົດໝາຍ, ລະບຽບການໃຫ້ປະຊາຊົນເຂົ້າເຖິງໄດ້ງ່າຍ ໂດຍຜ່ານການສ້າງຖານຂໍ້ມູນລວມຂອງທຸກໆກົດໝາຍ, ດຳລັດ ຂອງນາຍົກລັດ ຖະມົນຕີ, ລະບຽບການ ແລະ ຄຳແນະນຳ. | MoJ ແລະ ບັນດາກະຊວງກ່ຽວຂ້ອງອື່ນໆ | | ຈົດໝາຍເຫດທາງລັດຖະການລາວ ທາງເອເລັກໂຕຣນິກ (http://laoofficialgazette.gov.la/) ໄດ້ອອກເຜີຍແຜ່ໃນວັນທີ 11 ຕຸລາ 2013 ເພື່ອເຜີຍແຜ່ນິຕິກຳໃໝ່ທັງໝົດ ເພື່ອໃຫ້ປະຊາຊົນປະກອບຄຳຄິດຄຳເຫັນເຂົ້າໃນຂະບວນການສ້າງກົດໝາຍ ເຊັ່ນດຽວກັບບັນດາກົດໝາຍໃໝ່ທັງໝົດຢູ່ຂັ້ນສູນກາງ ແລະ ຂັ້ນແຂວງ 15 ວັນກ່ອນການບັງຄັບໃຊ້ເປັນທາງການ. ດ້ວຍການສືບຕໍ່ຊ່ວຍເຫຼືອຂອງ ໂຄງການ LUNA II ຂອງອົງການ USAID, ກະຊວງຍຸຕິທຳໄດ້ເປີດໃຫ້ນຳໃຊ້ ຈົດໝາຍເຫດທາງລັດຖະການລາວ (LOG) ຢ່າງເຕັມສ່ວນໃນເດືອນທັນວາ 2014, ແລະ 248 ນິຕິກຳຂອງຊາດ (ຂໍ້ຕົກລົງ 79 ສະບັບ, ດຳລັດ 42 ສະບັບ, ຄຳແນະນຳ 10 ສະບັບ, ກົດໝາຍ |

| | | | |
|---|---|---|---|
| | | | 83 ສະບັບ, ຄຳສັ່ງ 31 ສະບັບ ແລະ ລັດຖະບັນຍັດ 3 ສະບັບ) ແມ່ນໄດ້ນຳອອກເຜີຍແຜ່ໃນປີນັ້ນ. |
| 3 ປັບປຸງລະບອບສ່ວຍສາອາກອນໃຫ້ແກ່ SMEs ໂດຍການສ້າງຕັ້ງໜ່ວຍງານອາກອນທີ່ອຸທິດຕົນສຳລັບ SME ຢູ່ຂັ້ນເມືອງ; ສ້າງຄຳແນະນຳລະອຽດສຳລັບລະບົບສ່ວຍສາອາກອນທີ່ມີການປະເມີນການໃຫ້ເສຍອາກອນເອົາຕາມຄວາມໜ້າຈະເປັນໄປໄດ້; ສ້າງຊຸດເຄື່ອງມືການບັນຊີແບບງ່າຍດາຍສຳລັບລະບອບສ່ວຍສາອາ ກອນທີ່ກຳນົດຕາມຄວາມໜ້າຈະເປັນໄປໄດ້ (ອາກອນມອບເໝົາ) ເພື່ອອຳນວຍຄວາມສະດວກໃຫ້ SMEs ຫລາຍທົ່ວໜ່ວຍກວ່າເກົ່າ ສາມາດຂ້າມຜ່ານຈາກລະ ບອບສ່ວຍສາອາກອນແບບມອບເໝົາໄປສູ່ລະບອບສ່ວຍສາອາກອນຕາມລະບົບການຖືບັນຊີ. | MoF | PFMSP, ໂຄງການການຈັດເກັບອາກອນສຳລັບ SME | ບໍ່ມີ (ຫຼືບໍ່ສາມາດຊອກຫາໄດ້) ຂໍ້ມູນຂ່າວສານກ່ຽວກັບລະບອບສ່ວຍສາອາກອນສຳລັບ SME. ໃນບົດບັນທຶກການປະຕິຮູບການດຳເນີນທຸລະກິດປີ 2021 ຂອງ ສປປ ລາວ, ໄດ້ກຳນົດ 3 ຂົງເຂດການປະຕິຮູບດ້ານສ່ວຍສາອາກອນ ຄື: (1) ຄວາມຖີ່ຂອງການຊຳລະອາກອນລາຍໄດ້ຂອງວິສາຫະກິດຫຼຸດລົງຈາກ 4 ເປັນ 2 ຄັ້ງຕໍ່ປີ; (2) ອາກອນລາຍໄດ້ຂອງວິສາຫະກິດຫຼຸດລົງຈາກ 24% ເປັນ 20%; ແລະ (3) ອັດຕາອາກອນສຳລັບພາຫະນະປັບປຸງຈາກ 200.000 ກີບ ເປັນ 50.000 – 500.000 ກີບ. ການຊຳລະອາກອນຖືວ່າມີຄວາມສະດວກງ່າຍດາຍຂຶ້ນດ້ວຍການນຳໃຊ້ລະບົບການຊຳລະອາກອນຜ່ານທາງເອເລັກໂຕຣນິກ. ແນວໃດກໍ່ຕາມ, ລະບົບການລາຍງານອາກອນປະຈຳປີຍັງຄົງມີຄວາມສັບສົນ ແລະ ມີຄ່າໃຊ້ຈ່າຍຫຼາຍເຫລືອເກີນ, ເຊິ່ງເຮັດໃຫ້ວິສາຫະກິດ SME ສ່ວນໃຫຍ່ບໍ່ຍອມຮັບເອົາລະບອບສ່ວຍສາອາກອນທີ່ອີງໃສ່ການຖືບັນຊີ. |
| 4 ປັບປຸງການບັງຄັບໃຊ້ຂໍ້ຜູກພັນສັນຍາ ແລະ ການແກ້ໄຂຂໍ້ຂັດແຍ່ງຜ່ານການ | MoJ, MOIC | LUNA | ໂຄງການ LUNA II ໄດ້ຊ່ວຍເຫຼືອ LNCCI ເພື່ອພັດທະນາຂີດ ຄວາມສາມາດໃນການໃຫ້ບໍລິການແກ້ໄຂຂໍ້ຂັດແຍ່ງທາງທຸລະກິດ, ຍ້ອນພາກເອກະ |

| | | | | |
|---|---|---|---|---|
| | ປັບປຸງກົດໝາຍວ່າດ້ວຍສັນຍາທີ່ຫລ້າສະໄໝ, ການສ້າງຂີດຄວາມສາມາດຂອງສະພາທະນາຍຄວາມລາວ ແລະ ເສີມສ້າງບົດບາດການໄກ່ເກ່ຍ ແລະ ພາລະບົດບາດການຕັດສິນຂອງສູນໄກ່ເກ່ຍຂໍ້ຂັດແຍ່ງທາງດ້ານເສດຖະກິດໃນການແກ້ໄຂຂໍ້ຂັດແຍ່ງທາງການຄ້າ. | | | ຊຶ່ງກໍ່ໄດ້ຮັບອະນຸຍາດໃນການໃຫ້ບໍລິການດ້ານນີ້ ໂດຍອີງຕາມກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ, ນອກເໜືອຈາກການບໍລິການຂອງລັດຖະບານຜ່ານສູນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດຂອງ MOJ . |
| 5 | ເພີ່ມທະວີການຄຸ້ມຄອງຜູ້ຊົມໃຊ້ ໂດຍຜ່ານການພັດທະນາບັນດາອົງການທີ່ກ່ຽວຂ້ອງໃນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການປົກປ້ອງຜູ້ຊົມໃຊ້ (ການສ້າງຕັ້ງສະມາຄົມປົກປ້ອງຜູ້ຊົມໃຊ້, ລະບົບຕິດຕາມກວດກາ ແລະ ພະຍາກອນລາຄາ, ສ້າງຂີດຄວາມສາມາດທາງດ້ານການບັງຄັບໃຊ້ລະບຽບການຂອງໜ່ວຍງານກວດກາການຄ້າ). | MOIC | EIF II | ເຖິງແມ່ນວ່າໄດ້ມີບາງໂຄງການຊ່ວຍເຫລືອ (TA) ທີ່ GIZ ເປັນຜູ້ຈັດຕັ້ງປະຕິບັດ ໂດຍຜ່ານໂຄງການຂອງພາກພື້ນ, ແຕ່ພື້ນຖານໂຄງລ່າງທາງດ້ານການຈັດຕັ້ງທີ່ຈຳເປັນສຳລັບການປົກປ້ອງຜູ້ຊົມໃຊ້ແມ່ນຍັງບໍ່ພຽງພໍ ແລະ ອ່ອນນ້ອຍ. |
| 6 | ຮັບປະກັນຄວາມເປັນທຳໃນການແຂ່ງຂັນໃຫ້ທຸກວິສາຫະກິດໃນດ້ານໂອກາດປະສົບຜົນສຳເລັດ ແລະ ຄວາມສະເໝີພາບຕໍ່ໜ້າກົດໝາຍ, ໂດຍສະເພາະ | MOIC ແລະ ບັນດາ | TDF II | TDF II ໄດ້ສຳເລັດການປະເມີນລະບຽບການຂອງການຄ້າການບໍລິການ ແລະການລົງທຶນ, ເຊິ່ງໄດ້ກຳນົດອອກມາວ່າກົດໝາຍ, ລະບຽບການ ແລະ ການປະຕິບັດທາງດ້ານບໍລິຫານ ຄືປັດໄຈຫຼັກທີ່ເປັນສິ່ງຈຳກັດຂະແໜງການ |

| | | | | |
|---|---|---|---|---|
| | ແມ່ນໃນຂະແໜງການບໍລິການຕົ້ນຕໍ ເຊິ່ງຍັງຂາດອີງການຄຸ້ມຄອງທີ່ເປັນ ອິດສະຫລະຈາກຜູ້ວາງນະໂຍບາຍ ໂດຍຜ່ານການນຳເອົານະໂຍບາຍ ແລະ ກົດໝາຍວ່າດ້ວຍການແຂ່ງຂັນທີ່ ທັນສະໄໝ ແລະ ຄົບຖ້ວນມາໃຊ້. | ກະຊວງ ກ່ຽວຂ້ອງ ອື່ນໆ | | ບໍລິການໃນ ສປປ ລາວ. TDF II ໄດ້ໃຫ້ການສະໜັບສະໜູນກະຊວງ ໄປສະນີ ແລະ ໂທລະຄົມມະນາຄົມ ໃນການສ້າງຮ່າງລະບຽບການຕ່າງໆ, ໂດຍສະເພາະໃນຂອບຂອງການແຂ່ງຂັນ, ການເຊື່ອມຕໍ່ເຄືອຂ່າຍ, ລະບອບ ການອອກໃບອະນຸຍາດ ແລະ ການຄຸ້ມຄອງຄື້ນຄວາມຖີ່ ແລະທັງໝົດແມ່ນ ໄດ້ຖືກຮັບຮອງເອົາໃນໄລຍະໂຄງການ. TDF II ຍັງໄດ້ຈັດໃຫ້ມີການປະເມີນ ຜົນ ແລະ ການສະໜັບສະໜູນດ້ານວິຊາການແກ່ MOF ໃນການປັບປຸງຂອບ ຂ່າຍດ້ານລະບຽບການ ແລະ ການຕິດຕາມສຳລັບການບໍລິການປະກັນໄພ. ບົດລາຍງານການປະເມີນຜົນຍັງປະກອບມີຂໍ້ສະເໜີແນະດ້ານນະໂຍບາຍ, ຮ່າງລະບຽບການ ແລະການສ້າງຕັ້ງສະມາຄົມປະກັນໄພ. TDF II ສະໜັບ ສະໜູນການໃຫ້ບໍລິການຂອງນັກວິຊາຊີບການບັນຊີຂອງລາວ ທີ່ເປັນຜົນໃຫ້ມີ ການຮັບຮອງເອົາກົດລະບຽບຂອງສະພານັກວິຊາຊີບການບັນຊີ ແລະຜູ້ກວດ ສອບບັນຊີ, ກົດລະບຽບຂອງ ນັກວິຊາຊີບການບັນຊີລາວ, ຂໍ້ຕົກລົງຂອງ ລັດຖະມົນຕີວ່າດ້ວຍຈັນຍາບັນ ຂອງນັກວິຊາຊີບການບັນຊີ ແລະ ອື່ນໆ ທີ່ ເພີ່ມທະວີການຫັນເປັນມືອາຊີບ ຂອງນັກວິຊາຊີບການບັນຊີລາວໃຫ້ ໄປສູ່ ມາດຕະຖານອາຊຽນ. |
| 7 | ປັບປຸງການຮ່ວມມືລະຫວ່າງກະຊວງ ໃນການລຶບລ້າງຂໍ້ຈຳກັດໃນການເຄື່ອນ ຍ້າຍສິນຄ້າຢູ່ພາຍໃນ ແລະ ລະຫວ່າງ ແຂວງ. | MOIC, ອື່ນໆ | | ໄດ້ສຳເລັດແລ້ວໂດຍຜ່ານຄະນະກຳມະການປະສານງານລະດັບຊາດ ວ່າດ້ວຍ ການເຊື່ອມໂຍງເສດຖະກິດກັບສາກົນ (NSCEI) ເຊິ່ງປະກອບດ້ວຍບັນດາ ຮອງລັດຖະມົນຕີຈາກທຸກກະຊວງທີ່ກ່ຽວຂ້ອງທີ່ເປັນຫລັກຢູ່ໃນຄະນະ, ໂດຍມີ ທ່ານຮອງນາຍົກລັດຖະມົນຕີເປັນປະທານ. |

| | | | | |
|---|---|---|---|---|
| 8 | ປັບປຸງປະສິດທິພາບ ແລະ ປະສິດທິຜົນຂອງການປຶກສາຫາລືລະຫວ່າງພາກລັດ ແລະ ເອກະຊົນ PPD ເພື່ອແກ້ໄຂຂໍ້ຈຳກັດດ້ານສະພາບແວດລ້ອມທາງທຸລະກິດ ໂດຍຜ່ານການເສີມສ້າງຂີດຄວາມສາມາດຂອງ LNCCI ແລະ ສະມາຄົມ, ກຸ່ມ ແລະ ການຈັດຕັ້ງອື່ນໆຂອງທຸລະກິດ ໃນການໃຫ້ບໍລິການ, ການຄຸ້ມຄອງ ແລະ ການສະໜັບສະໜູນທາງດ້ານນະໂຍບາຍ (ການກຳນົດບັນຫາ, ການຄົ້ນຄວ້າບັນຫາ ແລະ ການໃຫ້ທັດສະນະທ່າທີ, ການອຳນວຍຄວາມສະດວກໃນການປຶກສາຫາລື ແລະ ການປະເມີນຜົນໄດ້ຮັບ) | LNCCI, MPI ແລະ MOIC | TDF II | ໄດ້ເຮັດສຳເລັດແລ້ວໂດຍຜ່ານກອງປະຊຸມທຸລະກິດລາວ, ທີ່ເປັນເຫດການສຳຄັນປະຈຳປີ, ເຊິ່ງໄດ້ຮວບຮວມບັນດາບັນຫາທີ່ເປັນຄວາມກັງວົນຈາກບັນດາຜູ້ນຳທາງທຸລະກິດພາກເອກະຊົນ ຫຼື ຜູ້ຕາງໜ້າໂດຍຜ່ານກອງປະຊຸມຕ່າງໆໃນທຸກໆເຄິ່ງປີ ຂອງໜ່ວຍງານຂະແໜງການໆຄ້າ ແລະ ພາກເອກະຊົນ (TPSWG). |
| 9 | ສ້າງຂີດຄວາມສາມາດຂອງບັນດາການຈັດຕັ້ງ ຂອງບັນດາຫົວໜ່ວຍທຸລະກິດ BMOs ໃນການກຳນົດ ແລະ ວິເຄາະບັນຫາສະພາບແວດລ້ອມແຫ່ງການດຳເນີນທຸລະກິດ ແລະ ສະໜັບສະໜູນ | LNCCI, MOIC | TDF II | ຈຳນວນຄູ່ຮ່ວມພັດທະນາທີ່ນັບມື້ເພີ່ມ ໄດ້ເຮັດວຽກກັບ LNCCI, ສະພາການຄ້າແຂວງ ແລະ ນັບທັງສະມາຄົມອຸດສາຫະກຳທີ່ໄດ້ເລືອກເອົາ ເພື່ອປັບປຸງຂີດຄວາມສາມາດທາງດ້ານການສະໜັບສະໜູນດ້ານນະໂຍບາຍ ກໍ່ຄືການໃຫ້ບໍລິການການພັດທະນາທຸລະກິດໃຫ້ແກ່ສະມາຊິກຂອງເຂົາເຈົ້າ. ຢ່າງໃດກໍ່ |

| | | | |
|---|---|---|---|
| PPD ໃນລະດັບຊາດ ແລະ ໃນບາງແຂວງທີ່ໄດ້ຖືກຄັດເລືອກ. | | | ຕາມ, ສ່ວນໃຫຍ່ແມ່ນຍ້ອນການເກັບຄ່າທຳນຽມສະມາຊິກທີ່ຕ່ຳ, BMOs ສ່ວນໃຫຍ່ກຳລັງຜະເຊີນກັບບັນຫາຄວາມຍືນຍົງທາງດ້ານການເງິນ. |
| 10 ປັບປຸງບັນດານະໂຍບາຍສົ່ງເສີມການລົງທຶນໃຫ້ສົມເຫດສົມຜົນໂດຍຜ່ານການດຳເນີນການທົບທວນທີ່ຄອບຄຸມບັນດານະໂຍ ບາຍສົ່ງເສີມທັງໝົດທີ່ໄດ້ບັນຍັດໄວ້ຢູ່ໃນກົດໝາຍຕ່າງໆ. | MPI, MoF | PFMSP | "ແຜນການປະຕິຮູບການລົງທຶນ (IRM) ສຳລັບ ສປປ ລາວ, ຄືພື້ນຖານດ້ານນະໂຍບາຍ ແລະ ຍຸດທະສາດໃໝ່ ຂອງການສົ່ງເສີມການລົງທຶນ" (ເດືອນມັງກອນ 2020) ເຊິ່ງກຸ່ມທະນາຄານໂລກ ໄດ້ເຮັດການຄົ້ນຄວ້າໂດຍໄດ້ພິນິດພິຈາລະນາກ່ຽວກັບບັນດານະໂຍບາຍສົ່ງເສີມການລົງທຶນທີ່ມີຢູ່ແລ້ວ ແລະສະເໜີໃຫ້ພິຈາລະນາຂໍ້ສະເໜີແນະກ່ຽວກັບຂອບຂ່າຍນະໂຍບາຍສົ່ງເສີມການລົງທຶນພ້ອມກັບນະໂຍບາຍ ແລະ ແຜນປະຕິບັດງານການປະຕິຮູບອື່ນໆ. ເຖິງຢ່າງໃດກໍຕາມ, ຍັງບໍ່ທັນມີຄວາມໝາຍໝັ້ນທີ່ຈະແຈ້ງໃນການປັບໃຫ້ລະບອບນະໂຍບາຍສົ່ງເສີມທີ່ມີໃນປັດຈຸບັນມີຄວາມສົມເຫດສົມຜົນ. |
| 11 ດຶງດູດການລົງທຶນທີ່ມີຄຸນນະພາບຢ່າງມີເປົ້າໝາຍໂດຍຜ່ານການສ້າງຍຸດທະສາດອຳນວຍຄວາມສະດວກແລະການສົ່ງເສີມການລົງທຶນແຫ່ງຊາດ, ລວມທັງກິດຈະກຳສະເພາະໃນການອຳນວຍຄວາມສະດວກ, ການໃຫ້ບໍລິການໃນການລົງທຶນ, ການຂະຫຍາຍການໃຫ້ບໍລິການຊ່ວຍເຫລືອນັກລົງທຶນ ແລະກິດຈະກຳການຕະຫຼາດໃນຕະຫຼາດເປົ້າໝາຍ. | MPI, MOIC | | ລັດຖະບານໄດ້ສ້າງຕັ້ງຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຕາມດຳລັດເລກທີ 05/ນຍ, ເພື່ອເປັນອົງການຫລັກໃນການສົ່ງເສີມ ແລະອະນຸມັດການລົງທຶນ ຂອງປະເທດພາຍໃຕ້ "ບັນຊີທຸລະກິດຄວບຄຸມ" ແລະບັນດາທຸລະກິດສຳປະທານລວມທັງເຂດເສດຖະກິດພິເສດ. ນອກຈາກນັ້ນ, ຍັງໄດ້ມີການສ້າງຕັ້ງຫ້ອງການບໍລິການປະຕູດຽວຢູ່ MPI, MOIC, ແລະSEZs. ແນວໃດກໍ່ຕາມ, ດັ່ງທີ່ໄດ້ລະບຸໄວ້ໃນແຜນການປະຕິຮູບການລົງທຶນຂອງ ສປປ ລາວ (ມັງກອນ 2020) ໂດຍ WB, ພື້ນຖານສຳລັບນະໂຍບາຍແລະ ຍຸດທະສາດໃໝ່ຂອງການສົ່ງເສີມການລົງທຶນ, ການບໍລິການປະຕູດຽວຢູ່ |

| | | | |
|---|---|---|---|
| | | | ແຕ່ລະກະຊວງ/ອົງການຕາມທີ່ມີຢູ່ ຍ່ອມສື່ຄວາມໝາຍເຖິງນັກລົງທຶນວ່າການຂຶ້ນທະບຽນວິສາ ຫະກິດ ເພື່ອເລີ່ມຕົ້ນທຸລະກິດແມ່ນຫຍຸ້ງຍາກແລະສັບສົນ. |
| 12 ປັບປຸງຂັ້ນຕອນການອອກໃບອະນຸຍາດໃຫ້ຂະແໜງອຸດສາຫະກຳປຸງແຕ່ງໃຫ້ມີປະ ສິດທິພາບຂຶ້ນ ໂດຍຜ່ານການປັບປຸງກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງທີ່ມີຢູ່ແລ້ວ ແລະ ລະບຽບການຈັດຕັ້ງປະຕິບັດທີ່ກ່ຽວຂ້ອງ. | MOIC | ໂຄງການປະຕິຮູບລະບຽບການ ແລະ ກົດໝາຍ | ຄຳສັ່ງ ຂອງນາຍົກລັດຖະມົນຕີ ເລກທີ 03/ນຍ ທີ່ອອກໃນເດືອນມັງກອນ 2020 ໄດ້ກຳນົດໃຫ້ກະຊວງ ອຄ (MOIC) ເປັນເຈົ້າການໃນວາລະການປະຕິຮູບກ່ຽວກັບໃບອະນຸຍາດດຳເນີນກິດຈະການ (OL). ໄດ້ມີການສ້າງຕັ້ງ 2 ໜ່ວຍງານວິຊາການເພື່ອຈັດຕັ້ງປະຕິບັດວຽກດັ່ງກ່າວ ຄື: ໜ່ວຍງານວິຊາການທີ່ມີຜູ້ຕາງໜ້າຈາກຫລາຍກະຊວງໄດ້ສ້າງຂຶ້ນ ແຕ່ເດືອນມັງກອນ 2021; ໜ່ວຍງານວິຊາການດ້ານການອອກໃບອະນຸຍາດຂອງ MOIC ເຊິ່ງຫ້ອງການກະຊວງເປັນຫົວໜ້ານຳພາໄດ້ສ້າງຕັ້ງໃນເດືອນພະຈິກ 2020. ກ່ອນໜ້ານີ້, DERM ໄດ້ຕົກລົງກັບກົມສົ່ງເສີມການລົງທຶນ (IPD) ທີ່ຂຶ້ນກັບກະຊວງແຜນການແລະການລົງທຶນ (MPI) ເພື່ອເພີ່ມທະວີການຮ່ວມມືໃນການຕິດຕາມແລະສະໜັບ ສະໜູນການປະຕິຮູບການອອກໃບອະນຸຍາດໂດຍບັນດາກະຊວງສາຍຕັ້ງ. ວິທີການທີ່ສຸມໃສ່ແກ້ໄຂຕາມລະດັບຄວາມສ່ຽງເພື່ອຄຸ້ມຄອງດັດສົມລະບົບ OL ສາມາດນຳມາໃຊ້ໄດ້ພາຍໃນ MOIC ແລະ ກໍ່ອາດຈະນຳໄປໃຊ້ໄດ້ຢູ່ກະຊວງອື່ນໆນອກຈາກ MOIC ເຊັ່ນກັນ. DERM ໄດ້ລາຍງານວ່າ ເປັນໄປໄດ້ທີ່ ກະຊວງສາທາລະນະສຸກ ແລະ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ອາດຈະນຳໃຊ້ວິທີການທີ່ສຸມໃສ່ແກ້ໄຂຕາມລະດັບຄວາມສ່ຽງຂອງການເກີດບັນຫາ. ໂດຍຜ່ານໜ່ວຍງານວິຊາການດ້ານການອອກໃບອະນຸຍາດຂອງ MOIC, DERM ໄດ້ເສີມຂະຫຍາຍບົດບາດນຳໜ້າພາທາງຂອງຕົນໃນການຄວບຄຸມດູແລ ແລະ ອຳ |

| | | | |
|---|---|---|---|
| | | | ນອຍຄວາມສະດວກໃນການປຶກສາຫາລືລະຫວ່າງສາມກົມ ຂອງ MOIC (DIMEX, DIH ແລະ DIT). ໜ່ວຍງານວິຊາການດັ່ງກ່າວໄດ້ຮັບຈະດຳເນີນຕາມແຜນການຈັດຕັ້ງປະຕິບັດໂດຍມີເປົ້າໝາຍການປະຕິຮູບທີ່ມີກຳນົດເວລາໃຫ້ສຳເລັດ, ມີການປຶກສາຫາລື ແລະ ການລາຍງານຄວາມຄືບໜ້າທີ່ເປັນປົກກະຕິ. ກຳລັງມີການທົບທວນຄືນບັນຊີລາຍການກິດຈະກຳ ແລະ OL ທີ່ກົງກັນທີ່ຈະຕ້ອງໄດ້ປັບເພື່ອຫລຸດຂັ້ນຂອດຕ່າງໆພາຍໃນ MOIC ໂດຍອີງໃສ່ຂໍ້ຕົກລົງຂອງລັດຖະມົນຕີເລກທີ 0044 ແລະ ລະດັບຄວາມສ່ຽງຂອງບັນດາກິດຈະກຳ. ໃບອະນຸຍາດ ທັງໝົດທີ່ MOIC ຄຸ້ມຄອງປະຕິບັດນັ້ນ ແລະ 4 ຂະແໜງການໃນບັນຊີລາຍການບຸລິມະສິດທີ່ຈະຕ້ອງໄດ້ປັບຫລຸດຂັ້ນຂອດນັ້ນໄດ້ຖືກລະບຸວ່າເປັນ "ສິ່ງທີ່ແມ່ຍິງມີຄວາມສົນໃຈເປັນພິເສດ".[1] ຂະບວນການຄັດເລືອກແມ່ນໄດ້ກຳນົດໃຫ້ສຳເລັດໃນເດືອນສິງຫາ 2021, ລວມທັງບັນດາບຸລິມະສິດການປະຕິຮູບ. ລະບົບຖານຂໍ້ມູນກ່ຽວກັບການຂໍອະນຸຍາດດຳເນີນທຸລະກິດ[2] ແມ່ນໄດ້ເປີດຕົວໃນເດືອນມັງກອນ 2021 ໂດຍໃຫ້ຂໍ້ມູນຂ່າວສານຫຼັກກ່ຽວກັບພິທີການໃນລະບົບລັດຖະການ 359 ຢ່າງ ລວມມີ ໃບອະນຸຍາດດຳເນີນທຸລະກິດ 149 ຊະນິດ. |

[1] ສີ່ຂະແໜງການປະກອບດ້ວຍ: 1) ກະສິກຳ, ປ່າໄມ້ & ການປະມົງ; 2) ສຸຂະພາບຄົນ ແລະ ກິດຈະກຳທາງສັງຄົມ; 3) ທີ່ພັກ ແລະ ອາຫານ; ແລະ 4) ການກໍ່ສ້າງ, ການຂົນສົ່ງ ແລະ ໂລຊິດສະຕິກ.

[2] http://bned.moic.gov.la/en .

| | | | | |
|---|---|---|---|---|
| 13 | ປັບປຸງການສັງລວມສະຖິຕິຂະແໜງອຸດສາຫະກຳປຸງແຕ່ງ ເພື່ອຊ່ວຍປະເມີນ ຖາ ນະຂອງຂະແໜງການ ແລະ ການສ້າງນະໂຍບາຍສະໜັບສະໜູນທີ່ເໝາະສົມ. | MOIC | ໂຄງການສ້າງຂີດຄວາມສາມາດທາງສະຖິຕິ | DOIH, ໂດຍການຊ່ວຍເຫຼືອຂອງ UNIDO ພາຍໃຕ້ໂຄງການສ້າງຄວາມເຂັ້ມແຂງ ຂອງສະຖິຕິອຸດສາຫະກຳໃນ ສປປ ລາວ, ໄດ້ດຳເນີນ "ການສຳຫຼວດສະຖານປະກອບການດ້ານອຸດສາຫະກຳກຳປຸງ 2016" ແລະ ໄດ້ເຜີຍແຜ່ບົດລາຍງານໃນເດືອນມິຖຸນາ 2018. |
| 14 | ປັບປຸງຄວາມໜ້າດຶງດູດການລົງທຶນໃນຂະແໜງການອຸດສາຫະກຳປຸງແຕ່ງ ໂດຍຜ່ານການທົບທວນຄືນບັນດາລະບຽບການທີ່ມີຢູ່ແລ້ວກ່ຽວກັບບັນດາເຂດ/ນິຄົມອຸດ ສາຫະກຳ ແລະ ພັດທະນານະໂຍບາຍທີ່ ເໝາະສົມ ເພື່ອດຶງດູດການລົງທຶນຂອງພາກເອກະຊົນໂດຍອີງໃສ່ຫຼັກການ PPP. | MOIC | | ດຳລັດຂອງນາຍົກລັດຖະມົນຕີວ່າດ້ວຍ PPP ໄດ້ວາງອອກໃນເດືອນທັນວາ 2020 ເພື່ອດຶງດູດການລົງທຶນຂອງເອກະຊົນເຂົ້າໃນໂຄງລ່າງພື້ນຖານ ແລະ ໂຄງການລົງທຶນທີ່ອີງໃສ່ສຳປະທານອື່ນໆ. |
| 15 | ສົ່ງເສີມການປ່ອຍສິນເຊື່ອໃຫ້ SME ໂດຍອີງໃສ່ກະແສເງິນສົດ ໂດຍຜ່ານການໃຫ້ການຊ່ວຍເຫຼືອດ້ານວິຊາການໃຫ້ແກ່ທະນາຄານທຸລະກິດທີ່ເລືອກເອົາເຊິ່ງມີຄວາມສົນໃຈໃນການເຈາະຕະຫຼາດ SME ແລະ ການສ້າງໃຫ້ມີ | ບັນດາທະນາຄານທຸລະກິດ | | ການປຶກສາຫາລືຢ່າງກວ້າງຂວາງລະຫວ່າງອົງການສົ່ງເສີມ SME ແລະ ທະນາຄານແຫ່ງ ສປປ ລາວກ່ຽວກັບການສ້າງຕັ້ງລະບົບການສົມທົບທຶນຊ່ວຍແບ່ງເບົາຄວາມສ່ຽງຈາກການຫລຸບທຶນ, ລວມທັງການຄ້ຳປະກັນສິນເຊື່ອເພື່ອສົ່ງເສີມການປ່ອຍກູ້ໃຫ້ແກ່ SMEs. ບັນດາອົງການພາກລັດທີ່ກ່ຽວຂ້ອງໄດ້ຕົກລົງໃນເບື້ອງຕົ້ນທີ່ຈະດຳເນີນການສຶກສາຄວາມເປັນໄປໄດ້ໃນການສ້າງໃຫ້ມີລະບົບການຄ້ຳປະກັນດ້ານສິນເຊື່ອຢູ່ໃນປະເທດ. |

| | | | | |
|---|---|---|---|---|
| | ການສົມທົບທຶນເພື່ອແບ່ງເບົາຄວາມສ່ຽງຂອງການຫລຸບທຶນໃຫ້ທະນາຄານໃນການປ່ອຍສິນເຊື່ອ ໂດຍໄດ້ຮັບການສະໜັບສະໜູນຈາກອົງການຜູ້ໃຫ້ທຶນ. | | | |
| 16 | ເລັ່ງພັດທະນາລະບົບການຊໍາລະແຫ່ງຊາດ, ຂະຫຍາຍການຄອບຄຸມຂອງ CIB ແລະ ປັບປຸງປະສິດທິພາບຂອງມັນ, ຈັດຕັ້ງການຂຶ້ນທະບຽນອະສັງຫາລິມະຊັບ. | BOL, MoF | | ໃນຊຸມປີຜ່ານມານີ້, ສປປ ລາວ ໄດ້ມີຄວາມພະຍາຍາມຢ່າງຕໍ່ເນື່ອງເພື່ອປັບປຸງຂໍ້ມູນສິນເຊື່ອໃຫ້ເລິກເຊິ່ງ. ໃນນີ້ລວມມີການສ້າງຕັ້ງສໍານັກງານຂໍ້ມູນຂ່າວສານສິນເຊື່ອ (CIB) ໃນປີ 2012 ເພື່ອສະໜອງຂໍ້ມູນສິນເຊື່ອໃຫ້ແກ່ທະນາຄານທຸລະກິດແລະສະຖາບັນການເງິນ; ພັດທະນາລະບົບການຂຶ້ນທະບຽນຫລັກຊັບຄໍ້າປະກັນທາງອອນລາຍ, ແບບເປັນເອກະພາບ, ເມື່ອມີການແຈ້ງຂໍມາ ເຊິ່ງລະບົບນີ້ແມ່ນຂຶ້ນກັບກະຊວງການເງິນ ແລະ ທັງໄດ້ມີການຮັບຮອງເອົາລະບຽບການທີ່ກ່ຽວຂ້ອງໃນໄລຍະປີ 2013-2016 ເພື່ອອໍານວຍຄວາມສະດວກໃນການນໍາໃຊ້ສັງຫາລິມະຊັບເພື່ອເປັນຫລັກຊັບຄໍ້າປະກັນໃຫ້ແກ່ SMEs. ການປະຕິຮູບເຫຼົ່ານີ້ໄດ້ປະກອບສ່ວນອັນສໍາຄັນເຂົ້າໃນການປັບປຸງການຈັດອັນດັບຂອງ ສປປ ລາວ ພາຍໃຕ້ຕົວຊີ້ວັດການໄດ້ຮັບສິນເຊື່ອຈາກ ທີ 167 ໃນບົດລາຍງານ DB 2013 ເປັນ 70 ໃນ DB 2016. ນອກຈາກນັ້ນ, ທະນາຄານແຫ່ງ ສປປ ລາວ BOL ໄດ້ດໍາເນີນການທີ່ສໍາຄັນໃນການປັບປຸງຄຸນນະພາບ ແລະ ການຄອບຄຸມຂອງຂໍ້ມູນຂ່າວສານ ພ້ອມທັງການໃຫ້ບໍລິການຂອງ CIB ໂດຍການສ້າງຕັ້ງບໍລິສັດຂໍ້ມູນສິນເຊື່ອລາວ (LCIC) ໃນຖານະເປັນຫົວໜ່ວຍທຸລະກິດເອກະລາດໃນປີ 2019 ອີງຕາມດໍາລັດວ່າດ້ວຍຂໍ້ມູນຂ່າວສານສິນເຊື່ອສະບັບປັບປຸງ ເລກທີ 224/ທຫລ. ນັບຕັ້ງແຕ່ໄດ້ສ້າງຕັ້ງມາ, LCIC ໄດ້ຕັດສິນໃຈທີ່ສໍາຄັນທີ່ຈະຂະຫຍາຍການຄອບ |

| | | | |
|---|---|---|---|
| | | | ຄຸນ ແລະປັບ ປຸງຄຸນນະພາບຂອງຂໍ້ມູນຂ່າວສານສິນເຊື່ອໂດຍການສ້າງສັນຍາຄູ່ຮ່ວມງານກັບຫົກອົງການພາກລັດ ແລະ ຫ້າບໍລິສັດສາທາລະນະປູປະໂພກ, ລວມທັງໄຟຟ້າ, ນ້ຳປະປາແລະສາມບໍລິສັດໂທລະຄົມມະ ນາຄົມເພື່ອເກັບກຳຂໍ້ມູນຂ່າວສານສິນເຊື່ອຂອງບຸກຄົນ, ນິຕິບຸກຄົນເພື່ອພັດທະນາການໃຫ້ຄະແນນສິນເຊື່ອ ແລະການຈັດອັນດັບສິນເຊື່ອໃນນາມຕົນເອງ. ຜະລິດຕະພັນໃຫມ່ທີ່ແມ່ນການໃຫ້ຄະແນນສິນເຊື່ອແລະການຈັດອັນດັບສິນເຊື່ອ ຄາດວ່າຈະເປີດຕົວໃນ ໜຶ່ງ ຫຼືສອງປີຂ້າງໜ້າ. |
| 17 ປັບປຸງການເຂົ້າເຖິງການບໍລິການດ້ານການເງິນຂອງວິສາຫະກິດຊົນນະບົດໂດຍຜ່ານການສົ່ງເສີມການເຮັດທຸລະກຳທາງການເງິນບົນມືຖື (ທະນາຄານບົນມືຖື) ແລະ ທະນາຄານຜ່ານທາງເອເລັກໂຕຣນິກ(ຄືນຳໃຊ້ເຄືອຂ່າຍຄອມພິວເຕີແລະໂທລະຄົມ) (e-banking) ດ້ວຍການສ້າງລະບຽບການທີ່ກ່ຽວຂ້ອງ. | BOL | | ການບໍລິການດ້ານການເງິນດິຈິຕອນ (ເຊັ່ນ: ເງິນຝາກປະຢັດ, ສິນເຊື່ອ, ປະກັນໄພ ແລະ ສິ່ງອຳນວຍຄວາມສະດວກໃນການຊຳລະສະສາງຜ່ານອຸປະກອນເອເລັກໂຕຣນິກ) ແມ່ນຢູ່ໃນຂັ້ນຕອນທີ່ຫາກໍ່ເລີ່ມ ໃໝ່ແທ້ໆຢູ່ ສປປ ລາວ. ການ"ເຕີມເງິນ" ໂດຍໃຊ້ມືຖື ແລະ ຊຳລະໃບບິນຄ່າສາທາລະນູປະໂພກໂດຍຜ່ານບັນຊີທະນາຄານທີ່ເປັນທາງການ, ອິນເຕີເນັດ ຫຼື ໂທລະສັບມືຖື ເປັນກິດຈະກຳດ້ານການເງິນດິຈິຕອນຢ່າງດຽວທີ່ແຜ່ຫຼາຍຢູ່ໃນ ສປປ ລາວໃນປັດຈຸບັນ. ນອກຈາກນັ້ນ, ໃນສະຖານະການປັດຈຸບັນ, ແມ່ນຍັງບໍ່ມີທຸລະກິດສະຕາດອັບດ້ານເຕັກໂນໂລຊີທາງການເງິນ fintech ທີ່ສາມາດເປັນໄພຂົ່ມຂູ່ໃດໆຕໍ່ສະຖາບັນການເງິນທີ່ເປັນທາງການເຊິ່ງທຳໜ້າທີ່ຢູ່. ທະນາຄານການຄ້າຕ່າງປະເທດລາວ (BCEL) ແລະ ສະຖາບັນການເງິນອື່ນໆ ກຳລັງກະກຽມນຳເອົາບໍລິການດ້ານການເງິນດິຈິຕອນມາໃຊ້. BCEL ມີແອັບພລິເຄຊັນ (ແອັບ) ມືຖືເພື່ອອຳນວຍຄວາມສະດວກໃຫ້ຜູ້ຖືບັດໃນການຈ່າຍເງິນ ແລະການທຳທຸລະກຳ. BCEL ແລະ UNITEL ວາງແຜນທີ່ຈະເປີດແອັບ ຜ່ານທາງມືຖືທີ່ປະຊາຊົນສາມາດຝາກເງິນ ທີ່ສາມາດໃຊ້ເປັນເງິນທາງເອເລັກໂຕຣ |

| | | | |
|---|---|---|---|
| | | | ນຶກ e-money (ເຊັ່ນ: ໂອນເງິນຜ່ານແອັບມືຖື). ທະນາຄານແຫ່ງ ສປປ ລາວ ກຽມເປີດການທະນາຄານທີ່ບໍ່ມີສາຂາ. |
| 18 ສະໜັບສະໜູນຂໍ້ລິເລີ່ມການຝຶກອົບຮົມພາກປະຕິບັດໂດຍອີງໃສ່ຄວາມຕ້ອງການເປັນຫລັກ ເຊິ່ງກຳລັງດຳເນີນຢູ່ ແລະ ຈັດໂດຍສະມາຄົມອຸດສາຫະກຳຕ່າງໆ (ສູນບໍລິການຕັດຫຍິບ, ສະຖາບັນການຝຶກອົບຮົມການທ່ອງທ່ຽວ ແລະ ການໂຮງແຮມ, ໂຄງການຝຶກອົບຮົມລະຫວ່າງສະມາຄົມການກໍ່ສ້າງ ແລະ NTC) | ສະມາຄົມອຸດສາຫະກຳຕ່າງໆ, MOIC | TDF II | ດ້ວຍການສະໜັບສະໜູນຂອງ TDF II, ສູນບໍລິການຕັດຫຍິບ (GSC) ໄດ້ຮັບຄວາມສົນໃຈຈາກຂະ ແໜງອຸດສາຫະກຳ ແລະ ໄດ້ປະສົບຜົນສຳເລັດບາງຢ່າງໃນການຈັດໃຫ້ມີການຝຶກອົບຮົມເພື່ອຍົກສູງທັກສະແຮງງານ. ເຖິງຢ່າງໃດກໍຕາມ, ຄວາມຍືນຍົງຂອງການດຳເນີນງານຂອງສູນ ກຳລັງປະເຊີນກັບສິ່ງທ້າທາຍບາງຢ່າງ ເນື່ອງຈາກອຸດສາຫະກຳຕັດຫຍິບ ຂອງລາວຍັງຂ້ອນຂ້າງມີຂະໜາດນ້ອຍ ແລະ ໂຮງງານກໍ່ຕັ້ງຢູ່ກະແຈກກະຈາຍໄປຕາມພື້ນທີ່ອັນກ້ວາງຂວາງ ເຮັດໃຫ້ຄົນງານໃນໂຮງງານທີ່ຕັ້ງຢູ່ຫ່າງໄກຈາກ GSC ບໍ່ມີຄວາມສະດວກທີ່ຈະເຂົ້າໄປຝຶກອົບຮົມນຳສູນໄດ້. |
| 19 ສຶກສາລົງເລິກກ່ຽວກັບສະພາບ ຂອງການຕະຫຼາດແຮງງານ ແລະ ຄວາມຕ້ອງການພັດທະນາສີມືແຮງງານ ຂອງພາກເອກະຊົນ ແລະ ສ້າງກົນໄກໄລຍະກາງເພື່ອພັດທະນາກຳລັງແຮງງານທີ່ມີທັກສະທີ່ ເໝາະສົມເພື່ອສະໜັບສະໜູນຂະແໜງ ການທີ່ ສປປ ລາວ ມີທ່າແຮງປຽບທຽບ. | MOLSW | | ໂດຍໄດ້ຮັບການສະໜັບສະໜູນຈາກບັນດາຄູ່ຮ່ວມພັດທະນາ, ໄດ້ດຳເນີນການສຳຫຼວດກຳລັງແຮງງານຫຼາຍຄັ້ງ ໃນຊຸມປີຜ່ານມາ. ສິ່ງທ້າທາຍຫຼັກໆທີ່ພົບເຫັນແມ່ນກ່ຽວຂ້ອງກັບຄຸນນະພາບຂອງວຽກ (ເຊັ່ນ: ຄວາມມີແຜ່ຫລາຍຂອງການຈ້າງງານແບບບໍ່ເຕັມສ່ວນ ແລະ ການຈ້າງງານທີ່ບໍ່ໝັ້ນຄົງ) ເຊັ່ນດຽວກັນກັບຜະລິດຕະພາບ ແລະລາຍຮັບທີ່ຍັງຕ່ຳ. ໃນເວລາດຽວກັນ, ການສຳຫຼວດຜູ້ໃຊ້ແຮງງານ ແລະຫຼັກຖານອື່ນໆຢືນຢັນວ່າຜູ້ໃຊ້ແຮງງານ/ນາຍຈ້າງຍັງມີຄວາມຫຍຸ້ງຍາກໃນການຊອກໄດ້ທັກສະທີ່ພວກເຂົາຕ້ອງການ. ຈຸດນີ້ຊີ້ໃຫ້ເຫັນເຖິງສະພາບການ "ທີ່ມີແຕ່ຜູ້ເສຍກັບເສຍ" ເຊິ່ງທຶນມະນຸດທີ່ອ່ອນນ້ອຍເປັນການກຳຈັດຄວາມຫຼາກຫຼາຍທາງດ້ານເສດຖະກິດແລະການປາກົດຕົວຂຶ້ນຂອງ |

| | | | |
|---|---|---|---|
| | | | ຂະແຫນງການທີ່ເປັນທາງການທີ່ທັນສະໄຫມ, ໃນຂະນະທີ່ຊາວໜຸ່ມແມ່ນພົບໂອກາດທີ່ຈຳກັດໃນອະນາຄົດທີ່ຈະມີວຽກເຮັດງານທຳທີ່ເຫມາະສົມແລະມັກຈະບໍ່ມີການປະກອບພ້ອມປານໃດໃນການເຮັດວຽກຢ່າງກໍ່ໃຫ້ເກີດຜົນໃນຕຳແໜ່ງວຽກງານໃນຂະແຫນງການທີ່ທັນສະໄຫມທີ່ມີຢູ່. ຍຸດທະສາດໄລຍະກາງຫາໄລຍະຍາວທີ່ ເໝາະສົມໃນການພັດທະນາກຳລັງແຮງງານທີ່ມີຄວາມຊຳນານງານແມ່ນໄດ້ຮັບການພັດທະນາຂຶ້ນໂດຍຜ່ານການຮ່ວມມືກັນລະຫວ່າງກະຊວງສຶກສາທິການ ແລະ ກະຊວງແຮງງານ. |
| 20 ຫຼຸດຜ່ອນຊ່ອງວ່າງລະຫວ່າງຜູ້ຮູ້-ຜູ້ບໍ່ຮູ້ກ່ຽວກັບຂໍ້ມູນຂ່າວສານໃນຕະຫຼາດແຮງງານໂດຍຜ່ານການພັດທະນາລະບົບຂໍ້ມູນຂ່າວສານຕະຫຼາດແຮງງານ | MOLSW | | *ການສຳຫຼວດກຳລັງແຮງງານ ສປປ ລາວ ປີ 2017* ໂດຍສູນສະຖິຕິແຫ່ງຊາດຂອງລາວ, MPI, ໂດຍການຊ່ວຍເຫຼືອຂອງອົງການ ILO, ເຊິ່ງເປັນການສຳຫລວດແຮງງານທີ່ຄົບຖ້ວນໃນທົ່ວປະເທດຫລ້າສຸດ ເປີດເຜີຍວ່າ ສປປ ລາວ ມີບັນຫາດ້ານໂຄງປະກອບຂອງແຮງງານ. ການສຳຫຼວດມີການລາຍງານວ່າອັດຕາການມີສ່ວນຮ່ວມໃນກຳລັງແຮງງານແມ່ນຂ້ອນຂ້າງຕ່ຳ ຄື 40,8% ແລະອັດຕາການວ່າງງານສູງ 9,4%. ເນື່ອງຈາກມີການໃຊ້ຄຳນິຍາມໃຫມ່ ຂອງກຳລັງແຮງງານ, ຜົນໄດ້ຮັບໃຫມ່ນີ້ບໍ່ສາມາດປຽບທຽບໄດ້ກັບຜົນການສຳຫຼວດແຮງງານທີ່ຜ່ານມາ, ເຊິ່ງສະແດງໃຫ້ເຫັນອັດຕາການມີສ່ວນຮ່ວມໃນກຳລັງແຮງງານສູງແລະອັດຕາການວ່າງງານຕ່ຳ. ໃນການສຳຫຼວດປີ 2017, ບຸກຄົນທີ່ປະກອບອາຊີບຜະລິດເພື່ອຊົມໃຊ້ເອງ (ກະສິກຳແບບກຸ້ມຕົນເອງພໍໃຜພໍລາວ) ແລະ ບໍ່ຊອກຫາວຽກເຮັດງານທຳໃນຊ່ວງນອກລະດູການຖືວ່າຢູ່ນອກກຳລັງແຮງງານ, ເຊິ່ງເຮັດໃຫ້ຂະໜາດຂອງກຳລັງແຮງງານຫຼຸດລົງຢ່າງເຫັນຜົນ ແລະ ເພາະສະນັ້ນກໍ່ລວມທັງ ອັດຕາການມີສ່ວນຮ່ວມໃນກຳລັງແຮງງານ. ເນື່ອງຈາກສະພາບຕະຫຼາດແຮງງານຄືງທີ່, ສິ່ງນີ້ກໍ່ເຮັດໃຫ້ອັດຕາ |

| | | | |
|---|---|---|---|
| | | | ການວ່າງງານເພີ່ມຂຶ້ນ ຢ່າງມີພົນເຊັ່ນກັນ, ເນື່ອງຈາກວ່າກຳລັງແຮງງານມີໜ້ອຍ, ເຊິ່ງເປັນຕົວຫານໃນສູດອັດຕາການວ່າງງານ (ອັດຕາການວ່າງງານ = ຈຳນວນຄົນວ່າງງານຫານໃຫ້ຈຳນວນບຸກຄົນທັງໝົດທີ່ມີໃນກຳລັງແຮງງານ). |
| 21 ປັບປຸງຄຸນນະພາບສະພາບພ້ອມໃຊ້ປະໂຫຍດ ແລະເນື້ອໃນທີ່ກ່ຽວຂ້ອງຂອງຂໍ້ມູນຂ່າວສານຢູ່ໃນເວັບໄຊສຳລັບ SMEs ໂດຍການສ້າງເວັບໄຊຢູ່ໃນບ່ອນສະເພາະທີ່ນິຍົມໃຊ້ກັນ ສຳລັບ SMEs ເຊັ່ນ: smetoolkits.org. | MOIC | TDF II | ດ້ວຍການລິເລີ່ມຂອງ DOSMEP, ສູນບໍລິການ SME ໄດ້ຖືກສ້າງຕັ້ງຂຶ້ນ, ໂດຍການຊ່ວຍເຫຼືອຂອງ GIZ ແລະຕັ້ງຢູ່ໃນ LNCCI. ຄຽງຄູ່ກັນນັ້ນ, ກໍ່ໄດ້ສ້າງເວັບໄຊ SMELao.com ຂຶ້ນເພື່ອໃຫ້ຂໍ້ມູນທີ່ເປັນປະໂຫຍດແກ່ SME. |
| 22 ປັບປຸງການຄຸ້ມຄອງເສດຖະກິດມະຫາພາກໂດຍຜ່ານການປັບປຸງການສັງລວມຂໍ້ມູນທີ່ກ່ຽວຂ້ອງ, ລວມທັງຂໍ້ມູນການຄ້າແລະອຸດສາຫະກຳ. | MPI, MOIC, MOF, BOL | ໂຄງການສ້າງຂີດຄວາມສາມາດທາງດ້ານວຽກງານສະຖິຕິ | ຂໍ້ມູນດ້ານການຄ້າແລະອຸດສາຫະກຳ, ເຊັ່ນດຽວກັນກັບຂໍ້ມູນທີ່ສຳຄັນອື່ນໆສຳລັບການຄຸ້ມຄອງເສດຖະກິດມະຫາພາກລວມທັງລາຍຮັບຂອງລັດ, ລາຄາ, ຂໍ້ມູນອັດຕາແລກປ່ຽນກໍ່ໄດ້ມີການເກັບກຳ, ວິເຄາະ ແລະ ລາຍງານເປັນປົກກະຕິໂດຍ BOL, MOF, MPI ແລະ MOIC. ການຄຸ້ມຄອງເສດຖະກິດມະຫາພາກຂອງ ສປປ ລາວ ແມ່ນສຸມໃສ່ຄວາມໝັ້ນທ່ຽງຂອງລາຄາ ແລະອັດຕາແລກປ່ຽນ ໂດຍມີກຳນົດຂອບເຂດການເໜັງຕີງຂອງອັດຕາແລກປ່ຽນໃຫ້ຢູ່ໃນ 5% ຕໍ່ປີ. |
| 23 ສົ່ງເສີມການນຳໃຊ້ມາດຕະການທາງເລືອກອື່ນໆຂອງການພັດທະນາເພື່ອໃຫ້ກວມເຖິງ ການແຈກຢາຍລາຍໄດ້, | MPI, MOIC | | ຄວາມຍືນຍົງ, ການເຕີບໂຕສີຂຽວ ແລະ ຄຸນນະພາບຂອງຊັບພະຍາກອນມະນຸດ ແມ່ນຈຸດປະສົງຫຼັກຂອງ NSEDP IX ທີ່ໄດ້ຮັບຮອງເອົາໃນຕົ້ນປີ 2021. ສິ່ງທ້າທາຍແມ່ນວິທີການຮັບປະກັນການປະຕິບັດມາດຕະການທີ່ໄດ້ກຳນົດໄວ້ໃຫ້ມີປະສິດທິຜົນເພື່ອບັນລຸເປົ້າໝາຍຂ້າງເທິງ. |

| | | | |
|---|---|---|---|
| ພ້ອມທັງມິຕິທາງສັງຄົມແລະ ສິ່ງແວດລ້ອມ | | | |
| 24 ເລືອກໃຊ້ຢ່າງທັນການ ບັນດາມາດຕະການທີ່ຈຳເປັນ ເພື່ອບັນເທົາຜົນກະທົບ ທີ່ອາດຈະເກີດຂຶ້ນຈາກການຂະຫຍາຍຕົວໄວຂອງຂະແໜງຊັບພະຍາກອນຕໍ່ຄວາມສາມາດໃນການແຂ່ງຂັນຂອງຂະແໜງ ການອຸດສາຫະກຳປຸງແຕ່ງ ແລະ ການບໍລິການ ໂດຍຜ່ານການຕິດຕາມຢ່າງໃກ້ຊິດບັນດາຕົວຊີ້ວັດເສດຖະກິດມະຫາພາກ ເຊັ່ນ: ການເຄື່ອນໄຫວຂອງອັດຕາແລກປ່ຽນຕົວຈິງ; ການປ່ຽນແປງຂອງຄ່າຈ້າງທີ່ແທ້ຈິງທຽບກັບການເຕີບໂຕຂອງຜະລິດຕະພາບແລະອື່ນໆ | MPI, MOIC, BOL, MOF | | ສປປ ລາວ ກ້າວເຂົ້າສູ່ປີ 2021 ໂດຍມີສິ່ງທ້າທາຍອັນໃຫຍ່ຫຼວງ ດ້ານການພັດທະນາ ເນື່ອງຈາກການເພິ່ງພາຊັບພະຍາກອນທຳມະຊາດຫຼາຍເກີນໄປ, ຄວາມສາມາດຟື້ນຄືນສູ່ສະພາບປົກກະຕິທີ່ຍັງຕ່ຳເມື່ອຖືກຜົນກະທົບ ແລະ ການຂາດດ້ານໃດໜຶ່ງໃນຄວາມສາມາດໃນການແຂ່ງຂັນ. ພະຍາດໂຄວິດ-19 ໄດ້ເຮັດໃຫ້ສິ່ງທ້າທາຍເຫຼົ່ານີ້ຮ້າຍແຮງຂຶ້ນໂດຍຈຳກັດຄວາມໜ້າດຶງດູດຂອງປະເທດໃນການເປັນຈຸດໝາຍປາຍທາງການລົງທຶນ ແລະ ເປັນການເປີດເຜີຍຕົວແບບການເຕີບໂຕທີ່ສ່ຽງຕໍ່ການຖືກກະທົບ ກະເທືອນ ອອກມາໃຫ້ເຫັນ. |

| | | |
|---|---|---|
| **ຂົງເຂດ ການແກ້ໄຂ ບັນຫາ ທີ 1.3** | **3. ການອຳນວຍຄວາມສະດວກທາງດ້ານການຄ້າ**<br><br>**ການປຸ່ງແປງລະດັບຜົນໄດ້ຮັບ:** ລະບົບຂັ້ນຕອນແລະຂະບວນການການນຳເຂົ້າ, ການສົ່ງອອກ ແລະການຜ່ານແດນທີ່ງ່າຍດາຍ, ໂປ່ງໃສ ແລະຖືກກວ່າ ໄດ້ຮັບການພັດທະນາຂຶ້ນໂດຍມີພາກເອກະຊົນກ່ຽວຂ້ອງນຳ.<br><br>**ຕົວຊີ້ວັດ:**<br>• ເປົ້າໝາຍຈຳນວນຄົນເຂົ້າເບິ່ງເວັບໄຊ ຂອງສູນຂໍ້ມູນຂ່າວສານການຄ້າຂອງລາວ ຕໍ່ປີ: 200.000 ຄັ້ງ<br>• ຈຳນວນມື້ສະເລ່ຍເພື່ອແຈ້ງການນຳເຂົ້າສິນຄ້າໂດຍກົງຜ່ານດ່ານກວດກາຂອງພາສີ (ES) ເປົ້າຫມາຍ: ໃຫ້ຫຼຸດລົງຈາກ 10,6 ມື້ໃນປີ 2009 ເປັນ 5,3 ມື້ ໃນປີ 2017<br>• ລະບົບແຈ້ງເສຍພາສີປະຕູດຽວແຫ່ງຊາດສາມາດໃຊ້ງານໄດ້<br>• ມີການປຶກສາຫາລືກັນເພີ່ມຂຶ້ນ ແລະ ຂໍ້ຈຳກັດຕ່າງໆໄດ້ຖືກແກ້ໄຂໂດຍຜ່ານກອງເລຂາອຳນວຍຄວາມສະດວກດ້ານການຄ້າແຫ່ງຊາດ | ເວັບໄຊ ຂອງສູນຂໍ້ມູນຂ່າວສານການຄ້າຂອງລາວ ໄດ້ມີຜູ້ເຂົ້າເບິ່ງເຖິງ 428.760 ຄົນ ໃນວັນທີ 31 ທັນວາ 2018 (661.971 ຄົນ ໃນວັນທີ 25 ພຶດສະພາ 2021), ຖືວ່າເກີນເປົ້າໝາຍທີ່ໃຫ້ໄດ້ 200.000 ຄົນ.<br><br>ຈຳນວນມື້ສະເລ່ຍ ເພື່ອແຈ້ງພາສີສຳລັບສິນຄ້າສົ່ງອອກໂດຍຕົງຢູ່ດ່ານຫຼຸດລົງເລັກນ້ອຍເປັນ 7,15 ມື້ໃນເດືອນມັງກອນ 2019, ຖືວ່າບໍ່ໄດ້ຕາມເປົ້າໝາຍທີ່ຕັ້ງໄວ້ທີ່ 3,8 ມື້.<br><br>ຈຳນວນມື້ສະເລ່ຍ ເພື່ອແຈ້ງພາສີສຳລັບສິນຄ້ານຳເຂົ້າໂດຍກົງຢູ່ດ່ານຫຼຸດລົງເປັນ 3,2 ມື້ໃນເດືອນມັງກອນ 2019, ຖືວ່າໄດ້ລື່ນເປົ້າຫມາຍທຳອິດທີ່ຕັ້ງໄວ້ 5,3 ມື້.<br><br>ໄດ້ທົດລອງໃຊ້ລະບົບແຈ້ງເສຍພາສີປະຕູດຽວແຫ່ງຊາດ ຢູ່ດ່ານພາສີວຽງຈັນ-ໜອງຄາຍ ໃນປີ 2020.<br><br>ມີການປຶກສາຫາລືກັນເພີ່ມຂຶ້ນ ແລະ ຂໍ້ຈຳກັດຕ່າງໆໄດ້ຖືກແກ້ໄຂໂດຍຜ່ານກອງເລຂາອຳນວຍຄວາມສະດວກດ້ານການຄ້າແຫ່ງຊາດ ດ້ວຍມີການຈັດກອງປະຊຸມໃນລະດັບວິຊາການຖີ່ຂຶ້ນກວ່າເກົ່າ ເພື່ອແກ້ໄຂບັນຫາທີ່ພາກເອກະຊົນໄດ້ຍົກຂຶ້ນ. |

| 1.3 ການແກ້ໄຂບັນຫາ | ອົງການ | ການໃຫ້ທຶນ/ ໂຄງການ | ຜົນໄດ້ມາໃນປີ 2021 (ການຈັດຕັ້ງປະຕິບັດນັບຕັ້ງແຕ່ 2012/13) |
|---|---|---|---|
| 1 ເສີມຂະຫຍາຍຄວາມສາມາດຂອງອົງກອນອຳນວຍຄວາມສະດວກດ້ານການຄ້າແຫ່ງຊາດ | NTFC | TDF II | ໄດ້ມີການສ້າງແຜນດຳເນີນງານວຽກງານອຳນວຍຄວາມສະດວກທາງດ້ານການຄ້າຂອງ ສປປ ລາວ ປີ (2017-2022) ແລະ ຄະນະກຳມະການອຳນວຍຄວາມສະດວກດ້ານການຄ້າແຫ່ງຊາດ (NTFC) ໄດ້ສ້າງຕັ້ງຂຶ້ນໃນປີ 2018 ເພື່ອປ່ຽນແທນກອງເລຂາທີ່ມີລະດັບຕ່ຳກວ່າເພື່ອນຳພາການປະຕິຮູບວຽກງານອຳນວຍຄວາມສະດວກດ້ານການຄ້າ (WB, DIMEX). ໄດ້ຈັດການຝຶກອົບຮົມ ກ່ຽວກັບກົດ ໝາຍ ແລະລະບຽບການ, ຕິດຕາມດ້ວຍການປະເມີນຜົນໃນທຸກໆສາມເດືອນກ່ຽວກັບຄວາມຄືບໜ້າຫຼັງຈາກການຝຶກອົບຮົມ. ໄດ້ຈັດກອງປະຊຸມໃນລະດັບວິຊາການ ຖີ່ຂຶ້ນກວ່າເກົ່າເພື່ອແກ້ໄຂບັນຫາທີ່ພາກທຸລະກິດໄດ້ຍົກຂຶ້ນມາ, ເຊິ່ງເຮັດໃຫ້ບໍ່ຈຳເປັນ ຕ້ອງໄດ້ລໍຖ້າແຕ່ກອງປະຊຸມລະດັບສູງຂຶ້ນເພື່ອຕັດສິນໃຈຢ່າງເປັນທາງການ. |
| 2 ເຊື່ອມສານວຽກງານອຳນວຍຄວາມສະດວກທາງດ້ານການຄ້າ ເຂົ້າໃນວຽກຫລັກຂອງບັນດາກະຊວງທີ່ກ່ຽວຂ້ອງ | NTFC | TDF II | ໄດ້ມີການຕົກລົງນຳກັນລະຫວ່າງກະຊວງໃນການສ້າງຕັ້ງ NTFC, ຊຶ່ງປະກອບດ້ວຍ 7 ກະຊວງ ແລະ ມີລັດຖະມົນຕີກະຊວງແຜນການ ແລະການລົງທຶນ MPI ເປັນປະທານ. |
| 3 ມຸ່ງໄປເຖິງການເຮັດໃຫ້ຂັ້ນຕອນລະບຽບການດ້ານການຄ້າ ແລະ ພາສີມີຄວາມກະທັດຮັດງ່າຍດາຍ, ເປັນເອກະພາບກັນ ແລະ ທັນສະໄໝ | NTFC | TDF II | ສຳເລັດແລ້ວບາງສ່ວນ, ຍ້ອນວ່າ ລະບົບແຈ້ງເສຍພາສີປະຕູດຽວແຫ່ງຊາດໄດ້ມີການທົດລອງຢູ່ດ່ານຊາຍແດນ ວຽງຈັນ-ໜອງຄາຍ ເຊິ່ງມີ 2 ສິນຄ້າ ຄື: ນ້ຳມັນເຊື້ອໄຟ ແລະ ລົດຍົນ. ລະບົບແຈ້ງພາສີແບບອີເລັກໂຕຣນິກ |

| | | | |
|---|---|---|---|
| | | | ASYCUDA (ລະບົບອັດຕະໂນມັດສຳລັບຂໍ້ມູນດ້ານພາສີ) ໄດ້ຖືກຕິດຕັ້ງຢູ່ໃນ 11 ດ່ານຊາຍແດນສາກົນທີ່ສຳຄັນ. ສູນຂໍ້ມູນຂ່າວສານການຄ້າຂອງລາວແມ່ນໜຶ່ງໃນບັນດາຜົນສຳເລັດໃນການກ້າວໄປສູ່ການເຮັດໃຫ້ຂັ້ນຕອນລະບຽບການດ້ານການຄ້າ ແລະ ພາສີ ມີຄວາມກະທັດຮັດງ່າຍດາຍ, ເປັນເອກະພາບກັນ ແລະ ທັນສະໄໝ.<br><br>ກ່ຽວກັບການຈັດຕັ້ງປະຕິບັດແຜນງານວຽກງານອຳນວຍຄວາມສະດວກດ້ານການຄ້າຂອງອາຊຽນ ແລະ ບັນດາແຜນງານໂຄງການທີ່ກ່ຽວຂ້ອງ, ແມ່ນເປັນວຽກງານທີ່ກຳລັງດຳເນີນຢູ່ ສຳລັບບັນດາປະເທດສະມາຊິກອາຊຽນທັງໝົດ. ຢູ່ ສປປ ລາວ, ບັນດາອົງການທີ່ກ່ຽວຂ້ອງ ຂອງລັດຖະບານ ໄດ້ສືບຕໍ່ດຳ ເນີນໂຄງການວຽກງານນີ້ຢ່າງຕໍ່ເນື່ອງ ເຊິ່ງໄດ້ມີການຈັດກອງປະຊຸມປະຈຳປີ. |
| 4 ສືບຕໍ່ພັດທະນາສູນຂໍ້ມູນຂ່າວສານການຄ້າຂອງລາວ ໃຫ້ສາມາດໃຊ້ງານໂດຍໃຫ້ຕອບໂຈດໄດ້ດີຂຶ້ນຕື່ມ ເພື່ອຫຼຸດຜ່ອນຄ່າໃຊ້ຈ່າຍທາງທຸລະກຳທີ່ກ່ຽວຂ້ອງກັບການນຳເຂົ້າແລະສົ່ງອອກ | MOIC | TDF II | ສູນຂໍ້ມູນຂ່າວສານການຄ້າຂອງລາວ (LTP) ໄດ້ຮັບການບຳລຸງຮັກສາ, ປັບປຸງ ແລະຍົກລະດັບຂຶ້ນ. ຍອດຈຳນວນຍອດຜູ້ເຂົ້າຊົມໃນທ້າຍປີ 2018 ໄດ້ເພີ່ມຂຶ້ນເປັນ 2 ເທົ່າຂອງຕົວເລກຄາດໝາຍ 200.000 ຄົນ. ອັດຕາພາສີ ແລະ 384 NTMs, ເຊິ່ງໄດ້ຖືກຈັດແບ່ງຕາມການຈັດປະເພດຂອງ UNCTAD, ໄດ້ຖືກຈັດເຂົ້າໃນບັນຊີລາຍຊື່, ກຳນົດໝວດໝູ່ບ່ອນວາງ ແລະ ພິມເຜີຍແຜ່ຢູ່ໃນສູນຂໍ້ມູນຂ່າວສານການຄ້າຂອງລາວ, ເປັນການເພີ່ມທະວີຄວາມໂປ່ງໃສ ແລະປະສິດທິພາບໃນດ້ານການຄ້າສາ ກົນ. ຕໍ່ຈາກນັ້ນ, ກໍ່ໄດ້ເຜີຍແຜ່ 442 ມາດຕະຖານ (ລວມມີ 400 ມາດຕະຖານ ISO ແລະ IEC) ຢູ່ໃນ LTP, ເຮັດໃຫ້ບັນຊີລາຍການມາດຕະຖານແຫ່ງຊາດທີ່ມີໃນ LTP ມີຄວາມທັນກັບສະພາບປັດຈຸບັນເປັນຄັ້ງທຳອິດ ນັບຕັ້ງແຕ່ປີ 2014. ມີ |

| | | | |
|---|---|---|---|
| | | | ຫຼາຍກວ່າ 13.000 ລະຫັດສິນຄ້າຕາມລະບົບ HS, ເຊິ່ງເປັນສິ່ງສຳຄັນສຳລັບພໍ່ຄ້າຊາວຂາຍ, ໄດ້ຖືກອັບໂຫລດ ແລະ ການປັບໃຫ້ເປັນປັດຈຸບັນຄັ້ງຫຼ້າສຸດ (2018) ຂອງສາລະບານອັດຕາພາສີຂອງລາວ ກໍ່ຍັງໄດ້ຖືກອັບໂຫລດຂຶ້ນຢູ່ໃນເວັບ ຂອງ LTP. |
| 5 ຈັດຕັ້ງປະຕິບັດບັນດາພັນທະຜູກພັນສັນຍາການຄ້າສອງຝ່າຍ, ອາຊຽນ, GMS ແລະ WTO | MOIC | TDF II | ກອງເລຂາອຳນວຍຄວາມສະດວກທາງດ້ານການຄ້າແຫ່ງຊາດ (NTFS) ໄດ້ຮັບການສ້າງຕັ້ງຂຶ້ນ, ເຊິ່ງຕໍ່ມາໄດ້ຍົກລະດັບຂຶ້ນເປັນຄະນະກຳມະການອຳນວຍຄວາມສະດວກດ້ານການຄ້າແຫ່ງຊາດ ເພື່ອນຳພາ ແລະ ປະສານງານການປະຕິບັດແຜນຍຸດທະສາດ ແລະ ແຜນດຳເນີນງານວຽກງານອຳນວຍຄວາມສະດວກດ້ານການຄ້າແຫ່ງຊາດ ເຊິ່ງລວມມີການປະຕິບັດບັນດາພັນທະຜູກພັນຂອງ ສປປ ລາວ ພາຍໃຕ້ WTO, ອາຊຽນ, ແລະ GMS. |
| 6 ພັດທະນາຄວາມສາມາດຂອງພາກທຸລະກິດໃນການຄ້າຂາຍຢ່າງມີປະສິດທິພາບໂດຍສອດຄ່ອງກັບລະບຽບກົດໝາຍ | MOIC | TDF II | ໄດ້ດຳເນີນການໂດຍຜ່ານຮູບແບບຕ່າງໆ, ລວມທັງ LBF, ໜ່ວຍງານປຶກສາຫາລືຂອງພາກທຸລະກິດທີ່ LNCCI ເປັນຜູ້ປະສານງານ. |
| 7 ຈັດຫາອຸປະກອນ ແລະ ສິ່ງອຳນວຍຄວາມສະດວກໃຫ້ເໝາະສົມ ເພື່ອຮັບປະ ກັນການຄຸ້ມຄອງລະບຽບວິທີປະຕິບັດທາງການຄ້າ ແລະ ທາງພາສີຢ່າງລາບລື້ນ ແລະ ມີປະສິດທິພາບ | NTFC | TDF II | ໄດ້ປະກອບຄອມພິວເຕີໃຫ້ ສຳລັບການບໍລິການທາງພາສີ. ປັດຈຸບັນມີແຜນການສະໜອງອຸປະກອນການປະຊຸມທາງໄກ; ອຸປະກອນຫ້ອງວິໄຈສຳລັບການກວດກາ; ການພັດທະນາຊອບແວຖານຂໍ້ມູນທີ່ມີປະສິດທິພາບຫຼາຍຂຶ້ນເພື່ອທົດແທນລະບົບເອັກແຊນ Excel ໃນປັດຈຸບັນ. |

| | | | | |
|---|---|---|---|---|
| 8 | ຮັບຮອງເອົາກົດໝາຍວ່າດ້ວຍພາສີສະບັບປັບປຸງ ເພື່ອໃຫ້ສອດຄ່ອງກັບຫຼັກການຂອງອົງການການຄ້າໂລກ | ລັດຖະການພາສີ | | *ກົດໝາຍວ່າດ້ວຍພາສີສະບັບເລກທີ 81* ໄດ້ຮັບການຮັບຮອງຈາກສະພາແຫ່ງຊາດ ແລະ ຄາດວ່າຈະໄດ້ຮັບການຈັດປະຕິບັດໃນປີ 2021. |
| 9 | ເຮັດໃຫ້ສຳເລັດໃນການຫັນລະບົບຂັ້ນຕອນການແຈ້ງພາສີໃຫ້ເປັນ ອັດຕະໂນມັດ ຢູ່ບັນດາດ່ານໃຫຍ່ | ລັດຖະການພາສີ | | ລະບົບ ASYCUDA ໄດ້ຮັບການຕິດຕັ້ງຢູ່ໃນ 11 ຈຸດຜ່ານແດນສາກົນ ທີ່ສຳຄັນ. ລະບົບດັ່ງກ່າວໃຫ້ຜົນປະໂຫຍດແກ່ຜູ້ສົ່ງອອກ ແລະ ຜູ້ນຳເຂົ້າໂດຍມີການແຈ້ງພາສີທີ່ເປັນລະບົບປະຕູດຽວແບບດີຈີຕອນ. |
| 10 | ຈັດຕັ້ງປະຕິບັດກົດລະບຽບການປະເມີນມູນຄ່າແຈ້ງເສຍພາສີ ແລະ ການກວດກາທີ່ອີງໃສ່ການບໍລິຫານຄວາມສ່ຽງຢ່າງຄົບຖ້ວນຕາມຂໍ້ກຳນົດຂອງ WTO | ລັດຖະການພາສີ | | ພັດທະນາລະບົບການບໍລິຫານຄວາມສ່ຽງໂດຍການໃຊ້ລະຫັດສີເພື່ອຈຳແນກປະເພດຄວາມສ່ຽງສຳລັບຜະລິດຕະພັນອາຫານ, ຢາ ແລະ ກະສິກຳ. |
| | ອອກແບບ ແລະ ເລີ່ມຕົ້ນການຈັດຕັ້ງປະຕິບັດ ລະບົບແຈ້ງເສຍພາສີປະຕູດຽວແຫ່ງຊາດ ພາຍໃຕ້ການຊີ້ນຳຂອງກອງເລຂາອຳນວຍຄວາມສະດວກທາງດ້ານການຄ້າ ສ່ວນຂະຫຍາຍ. | NTFC | TDF II | ລະບົບແກນກາງການແຈ້ງເສຍພາສີປະຕູດຽວແຫ່ງຊາດລາວ (LNSW) ໄດ້ຮັບການພັດທະນາ ແລະ ທົດລອງຢູ່ຈຸດຜ່ານແດນ ວຽງຈັນ-ໜອງຄາຍ ໃນເດືອນທັນວາ 2020 ໂດຍນຳໃຊ້ກັບສິນຄ້າ 2 ປະເພດຄື: ນ້ຳມັນເຊື້ອໄຟ ແລະ ລົດຍົນ. ຂອບຂ່າຍທາງກົດໝາຍເພື່ອສະໜັບສະໜູນການຈັດຕັ້ງປະຕິບັດ LNSW ໄດ້ຮັບການພັດທະນາຂຶ້ນມາ ແລະ ໄດ້ມີນະຕິຕິກຳທາງດ້ານບໍລິຫານທີ່ອອກໂດຍກະຊວງການເງິນໃນເດືອນມັງກອນ 2019. ຍັງບໍ່ທັນໄດ້ເຊື່ອມໂຍງເຂົ້າກັບລະບົບແຈ້ງເສຍພາສີປະຕູດຽວຂອງອາຊຽນ ແລະ ຍັງມີຫຼາຍວຽກງານທີ່ຍັງຕ້ອງໄດ້ປະຕິບັດ. |

| | | |
|---|---|---|
| | 4. **ພື້ນຖານໂຄງລ່າງຂອງວຽກງານຄຸນນະພາບແຫ່ງຊາດ**<br><br>**ການປ່ຽນແປງໃນລະດັບຜົນໄດ້ຮັບ:** ຂີດຄວາມອາດສາມາດຂອງພື້ນຖານໂຄງລ່າງ ດ້ານວຽກງານຄຸນນະພາບໄດ້ຮັບການເສີມສ້າງແລະໃຊ້ການໄດ້ສໍາລັບການນໍາໃຊ້ມາດ ຕະຖານ SPS ແລະ TBT ໃຫ້ມີປະສິດທິພາບດີຂຶ້ນ ລວມທັງຂໍ້ກໍານົດທາງດ້ານກົດໝາຍແລະອົງການຄຸ້ມຄອງ, ສົ່ງຜົນໃຫ້ຜະລິດຕະພັນມີຄຸນນະພາບສູງຂຶ້ນສອດຄ່ອງກັບມາດຕະຖານສາກົນ.<br><br>**ຕົວຊີ້ວັດຕ່າງໆ:**<br>• ຈໍານວນຄົນທີ່ມີຄວາມຮູ້ເພີ່ມຂຶ້ນທາງດ້ານພາກປະຕິບັດດ້ານສຸຂະອະນາໄມອາຫານ<br>• ລະບົບສໍາລັບກວດກາສຸຂະອະນາໄມພືດ ແລະ ຄຸນນະພາບຂອງສິນຄ້ານໍາເຂົ້າ ແລະ ສົ່ງອອກໄດ້ຖືກສ້າງຂຶ້ນແລະໃຊ້ງານໄດ້<br>• ຂອບຂ່າຍດ້ານກົດໝາຍ ແລະ ລະບຽບການສໍາລັບພື້ນຖານໂຄງລ່າງ ດ້ານວຽກງານຄຸນນະພາບ (ລວມທັງ SPS ແລະ TBT) ໄດ້ຮັບການປັບປຸງ, ຈັດຕັ້ງປະຕິບັດ ແລະ ປັບໃຫ້ສອດຄ່ອງກັບບັນດາ | • ຂອບຂ່າຍດ້ານກົດໝາຍ ແລະ ລະບຽບການທີ່ສອດຄ່ອງກັນກັບບັນດາຫຼັກການ ຂອງ WTO ແລະ ບັນດາລະບົບ ຂອງບັນດາປະເທດອາຊຽນ/GMS ໄດ້ຖືກສ້າງຂຶ້ນແລະໃຊ້ງານໄດ້ ແລະ ສະຖາບັນທີ່ມີພະນັກງານທີ່ໄດ້ຮັບການຝຶກອົບຮົມແມ່ນໄດ້ຖືກສ້າງຕັ້ງຂຶ້ນສໍາລັບຂົງເຂດ**ການແກ້ໄຂບັນຫາ** 1.4 ໂດຍມີການທົດສອບ SPS ແລະ ຄຸນນະພາບຂອງຜະລິດຕະພັນສິນຄ້ານໍາເຂົ້າ ແລະ ສົ່ງອອກຢ່າງເປັນລະບົບ, ເຖິງແມ່ນວ່າການຍົກລະດັບຂີດຄວາມສາມາດຂອງຄົນໃຫ້ດີຂຶ້ນແມ່ນຍັງມີຄວາມຕ້ອງການຢູ່.<br>• ການກໍານົດມາດຕະຖານ, ການວັດແທກ, ການຮັບຮອງຄຸນນະພາບ, ການປະເມີນຄວາມສອດຄ່ອງ ແລະກິດຈະກໍາທີ່ກ່ຽວຂ້ອງແມ່ນດໍາເນີນການໂດຍໜ່ວຍງານທີ່ກ່ຽວຂ້ອງທີ່ຂຶ້ນກັບ DOSM.<br>• ໂດຍໄດ້ຮັບການຊ່ວຍເຫຼືອຂອງໂຄງການຕ່າງໆ, ໄດ້ດໍາເນີນການຝຶກອົບຮົມພະນັກງານ ແລະ ການພັດທະນາຫ້ອງວິໄຈເພື່ອຍົກສູງຂີດຄວາມສາມາດທາງດ້ານສະຖາບັນ, ແຕ່ພະນັກງານທີ່ມີທັກສະ ແລະ ຄວາມຮູ້ລົງເລິກສະເພາະ ແລະ ສິ່ງອໍານວຍຄວາມສະດວກທີ່ຈໍາເປັນສໍາລັບການທົດສອບ ແລະ ການຢັ້ງຢືນຜະລິດຕະພັນແມ່ນຍັງບໍ່ພຽງພໍ. ຈໍາເປັນຕ້ອງໄດ້ນໍາໃຊ້ກໍາລັງແຮງສັງລວມ ຂອງບັນດາອົງການພັດທະນາທີ່ເຮັດວຽກຢູ່ໃນຂົງເຂດນີ້ໃນ ສປປ ລາວ ດ້ວຍວິທີອໍານວຍຄວາມສະດວກໃຫ້ເປັນຢ່າງດີ. |

| ການແກ້ໄຂບັນຫາ | ອົງການ | ການໃຫ້ທຶນ/ໂຄງການ | ຜົນໄດ້ມາ ໃນປີ 2021 (ການຈັດຕັ້ງປະຕິບັດຮອດ ປີ 2012/13) |
|---|---|---|---|
| | ຫຼັກການ ຂອງ WTO ແລະ ບັນດາລະບົບ ຂອງ ບັນດາປະເທດອາຊຽນ/GMS.<br>• ມາດຕະຖານສາກົນໃນຂົງເຂດການປະເມີນຄວາມສອດຄ່ອງ ແລະ ການຢັ້ງຢືນ ໄດ້ຖືກນຳໃຊ້ໂດຍອົງການທີ່ກ່ຽວຂ້ອງ | | |
| 1 ເພີ່ມທຶນການເຄື່ອນໄຫວ ແລະ ຈຳນວນພະນັກງານວິຊາສະເພາະໃນລະດັບທີ່ຈຳເປັນ ເພື່ອນຳໃຊ້ຂີດຄວາມສາມາດ ທີ່ໄດ້ມາຈາກໂຄງການທີ່ພວມດຳເນີນຢູ່ ຢ່າງ ເໝາະສົມ. | ໜ່ວຍງານວິຊາການ SPS | ໂຄງການ SPS ຂອງ GMS | ການປະກອບທຶນແມ່ນຂຶ້ນກັບໂຄງການ; ຂີດຄວາມສາມາດຂອງພະນັກງານໄດ້ຖືກຍົກລະດັບຂຶ້ນໃນລະດັບໃດໜຶ່ງແລະກໍ່ຍັງຕ້ອງການພະນັກງານ ທີ່ມີທັກສະສະເພາະດ້ານທີ່ຈຳເປັນ ເພີ່ມເຕີມ. ໂດຍສະເພາະນັບຕັ້ງແຕ່ການແຜ່ລະບາດຂອງພະຍາດລະບາດໃນປີ 2020, ເງິນທຶນທີ່ມີຢູ່ໄດ້ຖືກຫັນໄປສຸມໃສ່ການຮັບມືກັບການແຜ່ລະບາດຂອງພະຍາດໂຄໂຣນາໄວຣັສ. |
| 2 ສ້າງຄວາມເຂັ້ມແຂງໃຫ້ມີການປະສານງານໃນວຽກງານ SPS ໂດຍການສ້າງ ຕັ້ງໜ່ວຍງານ SPS ໃນ ກົມປູກຝັງ(DOP, MOAF) | ໜ່ວຍງານວິຊາການ SPS | | ໄດ້ມອບໜາຍໃຫ້ມີບ່ອນ ຕິດຕໍ່ພົວພັນ ແລະ ຮັບຜິດຊອບ ຢູ່ສອງຈຸດ ໃນສອງກະຊວງທີ່ສຳຄັນ: MOAF (ສຳລັບສຸຂະພາບພືດແລະສັດ) ແລະ MOH (ສຳລັບສຸຂະພາບຂອງຄົນ). |

| | | | | |
|---|---|---|---|---|
| 3 | ໃຫ້ການສະໜັບສະໜູນສືບຕໍ່ໄປໃນການປັບປຸງ ແລະ ຈັດຕັ້ງປະຕິບັດຂອບຂ່າຍກົດໝາຍ ແລະ ລະບຽບການທີ່ສອດຄ່ອງກັບຫຼັກການຂອງ WTO ແລະ ລະບົບ ຂອງບັນດາປະເທດອາຊຽນ/ GMS. | ໜ່ວຍງານວິຊາການ SPS | TDF II | ວຽກງານທີ່ສໍາເລັດໃນໂຄງການໄດ້ເລີ່ມຕົ້ນໃນ TDF-1 ກ່ຽວກັບລະບຽບກົດໝາຍຕົ້ນຕໍໃນດ້ານ SPS, ເຊິ່ງໄດ້ນໍາໄປສູ່ການຮັບຮອງເອົາສາມກົດໝາຍກ່ຽວກັບການປ້ອງກັນພືດ, ການລ້ຽງສັດ ແລະ ວຽກງານສັດຕະວະແພດ ແລະ ຄວາມປອດໄພຂອງອາຫານ. ກະຊວງສາທາລະນະສຸກໄດ້ສໍາເລັດ, ໃນເດືອນມິຖຸນາ 2018, ການປະຕິຮູບລະບຽບການເພື່ອເຮັດໃຫ້ກົດໝາຍວ່າດ້ວຍຄວາມປອດໄພຂອງອາຫານສອດຄ່ອງກັບພັນທະສັນຍາດ້ານ SPS ຂອງ WTO. |
| 4 | ສືບຕໍ່ຮັກສາການສະໜັບສະໜູນເພື່ອແກ້ໄຂຊ່ອງວ່າງໃນຂີດຄວາມສາມາດພື້ນຖານ ດ້ານ SPS | ໜ່ວຍງານວິຊາການ SPS | | ຫຼັກການພື້ນຖານຂອງສັນຍາ SPS ຂອງ WTO ໄດ້ຖືກລວມເຂົ້າໄປຢູ່ໃນກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ. ສະຖາບັນ/ອົງການທີ່ກ່ຽວຂ້ອງ, ລວມທັງຫ້ອງວິໄຈ, ໄດ້ຮັບອຸປະກອນ ແລະ ການຊ່ວຍເຫຼືອດ້ານວິຊາການໃນການຝຶກອົບຮົມພະນັກງານ ແລະ ພະນັກງານຫ້ອງວິໄຈຈາກອົງການ ແລະ ໂຄງການຕ່າງໆ ລວມທັງ UNIDO, EIF, TDF, ARISE Plus Lao PDR, LANITH, ທະນາຄານໂລກ, USAID, EU, PTB ແລະ GIZ ຂອງເຢຍລະມັນ, ADB ແລະອົງການຊ່ວຍເຫຼືອຂອງນິວຊີແລນຜ່ານອາຊຽນ. |
| 5 | ກະກຽມຍຸດທະສາດແຫ່ງຊາດເພື່ອພັດທະນາຫ້ອງວິໄຈ/ຫ້ອງທົດລອງ | ໜ່ວຍງານວິຊາການ SPS | EIF II | ສປປ ລາວ ໄດ້ພັດທະນາຫ້ອງວິໄຈຈໍານວນໜຶ່ງ ລວມທັງຫ້ອງວິໄຈອາຫານ ແລະ ຢາ ຢູ່ໃນກະຊວງສາທາລະນະສຸກ; ຫ້ອງວິໄຈຂອງສູນປ້ອງກັນພືດຂອງ DOA, MOAF; ຫ້ອງວິໄຈເພື່ອກວດສອບຄຸນນະພາບອາຫານ ແລະ |

| | | | |
|---|---|---|---|
| | | | ຜະລິດຕະພັນກະເສດ ທີ່ມະຫາວິທະຍາໄລຈຳປາສັກ ແຂວງຈຳປາສັກ; ແລະ ຫ້ອງວິໄຈຈຸລິນຊີວິທະຍາ ທີ່ມະຫາວິທະຍາໄລສຸພານຸວົງ ແຂວງຫຼວງພະບາງ. |
| 6 ຂະຫຍາຍການສະໜັບສະໜູນດ້ານ SPS ສໍາລັບການສົ່ງເສີມການສົ່ງອອກໄປສູ່ການຜະສົມຜະສານຕະຫຼາດກັບຜະລິດຕະພັນໃໝ່ | ໜ່ວຍງານວິຊາການ SPS | ໂຄງການ SPS ຂອງ GMS | ການສະໜັບສະໜູນ SPS ສໍາລັບການສົ່ງອອກປະກອບມືໄມ້ແລະຜະລິດຕະພັນໄມ້ແລະກາເຟ. |
| 7 ປະເມີນທິດທາງ, ຮູບແບບ ແລະ ບຸລິມະ ສິດຂອງລະບົບທີ່ອີງໃສ່ ICT ໃນການບໍລິການ SPS | ໜ່ວຍງານວິຊາການ SPS | ໂຄງການ SPS ຂອງ GMS | ຂາດຂໍ້ມູນຂ່າວສານ |
| 8 ອອກແບບ ແລະຈັດຕັ້ງປະຕິບັດໂຄງການລົງທຶນແບບໂມດູນ (ຊຸດອຸປະກອນສ່ວນຈໍາເພາະ) ສໍາລັບ ICT ໃນການບໍລິການ SPS | ໜ່ວຍງານວິຊາການ SPS | ໂຄງການ SPS ຂອງ GMS | ຂາດຂໍ້ມູນຂ່າວສານ |
| 9 ສະໜັບສະໜູນການພັດທະນາພາກທຸລະກິດ ແລະການຈັດຕັ້ງຂອງຜູ້ຊົມໃຊ້ ແລະ ເຮັດໃຫ້ເຂົາເຈົ້າມີສ່ວນ | ໜ່ວຍງານວິຊາການ SPS | ໂຄງການ SPS ຂອງ GMS | ຂາດຂໍ້ມູນຂ່າວສານ |

| | | | |
|---|---|---|---|
| ຜູກພັນຢູ່ກັບວາລະການພັດທະນາດ້ານ SPS. | | | |
| 10 ເພີ່ມທະວີທຶນໃຫ້ແກ່ການດຳເນີນງານ ແລະຈຳນວນພະນັກງານທີ່ມີຄວາມຊ່ຽວຊານໃນວິຊາຊີບໃນລະດັບທີ່ຈຳເປັນເພື່ອນຳໃຊ້ ຂີດຄວາມສາມາດທີ່ໄດ້ສ້າງຂຶ້ນຢ່າງເໝາະສົມ. | MOST | | ພະນັກງານເພີ່ມເຕີມທີ່ມີທັກສະແລະຄວາມຮູ້ລົງເລິກສະເພາະດ້ານຍັງບໍ່ພຽງພໍ. |
| 11 ສ້າງຈຸດສອບຖາມເລື່ອງ TBT (EP) ໂດຍອີງໃສ່ການປະຕິບັດທີ່ດີຂອງສາກົນ ແລະ ປັບໃຫ້ເໝາະສົມກັບຄວາມຮຽກຮ້ອງຕ້ອງການຂອງເສດຖະກິດລາວ ແລະ ຄູ່ຄ້າ. | MOST | LUNA | ຈຸດສອບຖາມເລື່ອງ TBT ໄດ້ຮັບການສ້າງຕັ້ງຂຶ້ນຢູ່ DOSM, MOST, ໃນປີ 2014, ໂດຍມີພະແນກນະໂຍບາຍການຄ້າຫຼາຍຝ່າຍ, MOIC, ເປັນໜ່ວຍແຈ້ງຂໍ້ມູນ(ທີ່ເປັນທາງການ). ໂຄງການ LUNA II ຂອງ USAID ໄດ້ຈັດກອງປະຊຸມສຳມະນາໃນເດືອນກຸມພາ 2015 ໂດຍມີເຈົ້າໜ້າທີ່ 35 ຄົນຈາກ 10 ກະຊວງເຂົ້າຮ່ວມເພື່ອຮຽນຮູ້ຂັ້ນຕອນຂອງການກະກຽມ, ການຮັບຮອງເອົາ ແລະການນຳໃຊ້ລະບຽບການດ້ານວິຊາການທີ່ລວມຢູ່ໃນປະມວນ ຫລັກການປະຕິບັດ. ຢ່າງໃດກໍ່ຕາມ, ຄະນະຊ່ຽວ ຊານ ຂອງ ITC ທີ່ມາເຮັດວຽກ (2020) ໄດ້ລາຍງານວ່າ DOSM ບໍ່ສາມາດປັບຂໍ້ມູນໃຫ້ທັນກັບປັດຈຸບັນ ແລະ ໄດ້ສະແດງຄວາມຄິດເຫັນກ່ຽວກັບຄວາມຕ້ອງການໃນການທົບທວນ ແລະປັບປຸງການລາຍງານຂໍ້ມູນ ແລະການປັບລະບົບ ແລະຂັ້ນຕອນຕ່າງໆໃຫ້ເປັນປັດຈຸບັນ. |

| | | | | |
|---|---|---|---|---|
| 12 | ດຳເນີນການປະເມີນໃນແງ່ປະສົບການ ກ່ຽວກັບອຸປະສັກສຳລັບການຄ້າແລະ ຊ່ອງວ່າງໃນການປົກປ້ອງຄວາມປອດ ໄພຂອງຜູ້ຊົມໃຊ້ທີ່ເກີດຈາກຊ່ອງວ່າງ ໃນຂີດຄວາມ ສາມາດທາງດ້ານ TBT. | | | ອັນນີ້ແມ່ນລວມຢູ່ໃນການປະເມີນທີ່ໄດ້ດຳເນີນໂດຍການຊ່ວຍເຫຼືອຂອງ ໂຄງການ ARISE Plus Lao PDR ກ່ຽວກັບລະດັບການປະຕິບັດ ATIGA ແລະ ພັນທະຜູກພັນທີ່ກ່ຽວຂ້ອງ ຂອງ ແຜນງານປະຊາຄົມເສດຖະກິດອາຊຽນ 2025. |
| 13 | ອອກແບບ ແລະຮັບຮອງເອົາແຜນຍຸດ ທະສາດເພື່ອພັດທະນາໜ້າທີ່ ຂອງ DOSM ແລະ ຂອງ TBT | | | ໄດ້ສຳເລັດໃນປີ 2012. ກົມມາດຕະຖານ ແລະ ວັດແທກ (DOSM), ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ (MOST), ເປັນອົງກອນປະສານ ງານສຳລັບທຸກບັນຫາດ້ານມາດຕະຖານ ແລະ ການປະເມີນຄວາມສອດຄ່ອງ ລວມທັງການຍັ້ງຢືນຜະລິດຕະພັນ. |
| 14 | ການປັບປຸງຍົກລະດັບຂອບກົດໝາຍ ແລະ ລະບຽບການສຳລັບ TBT | MOST | LUNA | ໄດ້ສຳເລັດແລ້ວ. |
| 15 | ການຝຶກອົບຮົມໃຫ້ແກ່ພະນັກງານລັດ ໃນໜ່ວຍງານຍັ້ງຢືນ ແລະ ຫ້ອງວິໄຈ ໃນດ້ານຫຼັກການສາກົນຂອງການປະ ເມີນຄວາມສອດຄ່ອງ ແລະ ການ ຍັ້ງຢືນ. | MOST | | ການຝຶກອົບຮົມໄດ້ດຳເນີນເປັນສ່ວນໜຶ່ງຂອງແຜນງານຄຸນນະພາບດີເລີດ ຂອງໂຄງການ ARISE+ Lao PDR Quality Champion (ກຳລັງ ດຳເນີນຢູ່). |
| 16 | ກະກຽມຍຸດທະສາດແຫ່ງຊາດເພື່ອ ພັດທະນາຫ້ອງວິໄຈ | | | ໄດ້ລະບຸໃນຂໍ້ທີ 5 |

| | | | |
|---|---|---|---|
| 17 ສະໜັບສະໜູນການຄຸ້ມຄອງຄຸນນະພາບໃນຫ້ອງວິໃຈ TBT | | | ຫ້ອງວິໃຈ TBT ໄດ້ຮັບການຊ່ວຍເຫຼືອດ້ານວິຊາການໃນການຝຶກອົບຮົມພະນັກງານ ແລະ ພະນັກ ງານຫ້ອງວິໃຈຈາກອົງການ ແລະ ໂຄງການຕ່າງໆ ລວມທັງ UNIDO, EIF, TDF, ARISE Plus Lao PDR, LANITH, World Bank, USAID, EU, PTB ແລະ GIZ ຂອງເຢຍລະມັນ, ADB, ແລະ ອົງການຊ່ວຍເຫລືອຂອງນິວຊີແລັນ ຜ່ານອາຊຽນ. |
| 18 ສະໜັບສະໜູນການພັດທະນາຂອງພາກທຸລະກິດເອກະຊົນ ແລະ ການຈັດຕັ້ງຂອງຜູ້ຊົມໃຊ້ ແລະການໃຫ້ເຂົາເຈົ້າຮ່ວມກ່ຽວຂ້ອງຢູ່ກັບວາລະການພັດທະນາສໍາລັບ TBT. | | | ຂາດຂໍ້ມູນຂ່າວສານ |
| 19 ຈັດຕັ້ງປະຕິບັດບັນດາອົງປະກອບອື່ນໆຂອງແຜນຍຸດທະສາດຢ່າງເລືອກເຟັ້ນ | | | ຂາດຂໍ້ມູນຂ່າວສານ |

**ຕາຕະລາງ 3: ຂອບຂ່າຍການຕິດຕາມ ແລະ ປະເມີນຜົນ (M&E) ເສົາຄ້ຳທີ 2: ຄວາມສາມາດແຂ່ງຂັນ**

| | | |
|---|---|---|
| **ຜົນໄດ້ມາຂອງເສົາຄ້ຳ** | **ຄວາມສາມາດແຂ່ງຂັນ ແລະ ຄຸນນະພາບຂອງຂະແໜງທຸລະກິດການກະເສດ, ອຸດສາຫະກຳປຸງແຕ່ງ ແລະ ການບໍລິການ ໄດ້ຮັບການປັບປຸງດີຂຶ້ນ (ຄວາມສາມາດ ຂອງການສະໜອງ)** | |
| **ຂົງເຂດການແກ້ໄຂບັນຫາ 2.1** | 1. **ຄວາມສາມາດແຂ່ງຂັນໃນລະດັບວິສາຫະກິດ**<br>**ການປ່ຽນແປງລະດັບຜົນໄດ້ຮັບ:** ມາດຕະການສະໜັບສະໜູນຄຸນນະພາບແລະຜະລິດຕະພາບໃນລະດັບຂອງວິສາຫະກິດ SME ທີ່ນຳໄປສູ່ການຍົກສູງຄວາມສາມາດແຂ່ງຂັນຂອງພາກທຸລະກິດ, ໂດຍສະເພາະ SMEs ໃນຕະຫຼາດພາຍໃນແລະຕ່າງປະເທດໄດ້ຮັບການປັບປຸງ.<br>**ບັນດາຕົວຊີ້ວັດ:**<br>• ອັດຕາສ່ວນຮ້ອຍຂອງວິສາຫະກິດທີ່ມີໃບຢັ້ງຢືນທີ່ໄດ້ຮັບການຍອມຮັບຈາກສາກົນ (ເຊັ່ນ: ISO, HACCP, ການຄ້າທີ່ເປັນທຳ, GMP) (ES)<br>• ອັດຕາສ່ວນຮ້ອຍຂອງວິສາຫະກິດທີ່ໃຊ້ອີເມລ໌ເພື່ອຕິດຕໍ່ພົວພັນກັບລູກຄ້າ/ຜູ້ສະໜອງ (ES) | • ການນຳໃຊ້ສື່ອອນລາຍໃນໝູ່ MSMEs ໃນ ສປປ ລາວ ລວມທັງແອັບທີ່ນິຍົມໃຊ້ກັນ ເຊັ່ນ ແມສເຊັນເຈີ Messenger, ຫວັດແອັບ WhatsApp, ລາຍ LINE ໄດ້ເພີ່ມຂຶ້ນຢ່າງເຫັນໄດ້ຊັດໃນຊຸມປີມໍ່ໆມານີ້, ໂດຍສະເພາະນັບຕັ້ງແຕ່ມີການລະບາດຂອງພະຍາດໂຄໂຣນາໄວຣັສໃນຕົ້ນປີ 2020.<br>• ໄດ້ພົບວ່າວິສາຫະກິດທີ່ມີປະສົບການຫຼາຍກວ່າ ແລະ ມີຕະຫຼາດທີ່ຄຸ້ນເຄີຍມີທ່າອ່ຽງທີ່ຈະມີອັດຕາການຢູ່ລອດທີ່ດີກວ່າ.<br>• ຄວາມສາມາດໃນການແຂ່ງຂັນຂອງ SME ໃນຂະແໜງອຸດສາຫະກຳປຸງແຕ່ງໃນ ສປປ ລາວ ໂດຍອີງຕາມຕົ້ນທຶນຄ່າແຮງງານຕໍ່ຫົວໜ່ວຍ ຕາມການລາຍງານຂອງ ການສຳຫລວດວິສາຫະກິດ ໂດຍ WB, ໃນປີ 2018 ໄດ້ມີການປັບປຸງດີຂຶ້ນເມື່ອທຽບໃສ່ປີ 2012 ແຕ່ໄດ້ຫຼຸດລົງເມື່ອທຽບກັບປີ 2016. |

| | | | |
|---|---|---|---|
| | • ປະລິມານການຮ້ອງຂໍການຊ່ວຍເຫຼືອດ້ານວິຊາການທີ່ອີງໃສ່ຄວາມຕ້ອງການຈາກພາກທຸລະກິດ<br>• ອັດຕາຄວາມຢູ່ລອດເພີ່ມຂຶ້ນສຳລັບການຜະສົມຜະສານລະຫວ່າງຜະລິດຕະພັນສິນຄ້າ-ເປົ້າໝາຍປາຍທາງ-ຕະຫຼາດທີ່ມີຢູ່ແລ້ວ ແລະ ທັງອັນໃໝ່<br>• ຜະລິດຕະພາບໃນລະດັບວິສາຫະກິດເພີ່ມຂຶ້ນ (ທຽບກັບມາດຕະຖານອ້າງອີງຂອງປະເທດໃນພາກພື້ນ) | | |

| ການແກ້ໄຂບັນຫາ | ອົງການ | ການໃຫ້ທຶນ/ໂຄງການ | ຜົນໄດ້ມາໃນປີ 2021 (ການຈັດຕັ້ງປະຕິບັດນັບຕັ້ງແຕ່ 2012/13) |
|---|---|---|---|
| 1 ສ້າງໃຫ້ມີໂຄງການທຶນສົມທົບເພື່ອຊ່ວຍ ໜູນບັນດາໂຄງການຂະໜາດນ້ອຍ ເຊິ່ງຕອບສະໜອງຕໍ່ຂໍ້ຈຳກັດຕ່າງໆທີ່ພາກທຸລະກິດຖືເປັນບຸລິມະສິດໃນການປັບປຸງຄວາມສາມາດແຂ່ງຂັນຂອງເຂົາເຈົ້າໃນຕະຫຼາດພາຍໃນ ແລະ ຕ່າງປະເທດ. | MOIC | TDF II | ໂຄງການ BAF (ທຶນສົມທົບເພື່ອສົ່ງເສີມທຸລະກິດ) ໄດ້ໃຫ້ທຶນສົມທົບຊ່ວຍເຫຼືອລ້າເພື່ອສະໜັບ ສະໜູນວິສາຫະກິດສ່ວນບຸກຄົນໃນການສ້າງທັກສະແລະປະສົບການຂອງເຂົາເຈົ້າເພື່ອເພີ່ມຄວາມສາມາດໃນການແຂ່ງຂັນ.<br><br>BAF I ໄດ້ສ້າງຕັ້ງຂຶ້ນໃນເດືອນຕຸລາ 2013 ແລະສຳເລັດໃນເດືອນມີນາ 2017; ມັນໄດ້ຊ່ວຍເຫຼືອ 208 ວິສາຫະກິດ ເຊິ່ງ 34% ແມ່ນກິດຈະການແມ່ຍິງເປັນເຈົ້າຂອງ. |

| | | | |
|---|---|---|---|
| | | | ໃນກຸ່ມຂອງພວກເຂົາເຈົ້າ, ຜູ້ໄດ້ຮັບຜົນປະໂຫຍດ 30 ວິສາຫະກິດໄດ້ຖືກປະເມີນວ່າມີຄະແນນ 20 ສ່ວນຮ້ອຍທີ່ມີຜົນການປະຕິບັດງານສູງກວ່າ "ກຸ່ມຄວບຄຸມຂອງວິສາຫະກິດທີ່ຄ້າຍຄືກັນເຊິ່ງບໍ່ແມ່ນເປົ້າໝາຍທີ່ໄດ້ຮັບທຶນສົມທົບ", ໂດຍມີອັດຕາການເຕີບໂຕສະເລ່ຍ 16% (WB). ໂຄງການ BAF ໄດ້ບັນລຸເປົ້າຫມາຍທັງຫມົດຂອງຕົນ, ລວມທັງເປົ້າຫມາຍບົດບາດຍິງຊາຍ, ໃນດ້ານຈຳນວນທຸລະກິດທີ່ໄດ້ຮັບການສະຫນັບສະຫນູນແລະຜົນການປະຕິບັດງານຂອງທຸລະກິດທີ່ໄດ້ຮັບການສະຫນັບສະຫນູນ.<br><br>BAF II ໄດ້ເລີ່ມປະຕິບັດການຢ່າງເຕັມສ່ວນໃນເດືອນພຶດສະພາ 2019 ແລະ ເວັບໄຊທີ່ໃຊ້ເປັນຊ່ອງທາງເຂົ້າເຖິງຂໍ້ມູນ ຂອງ BAF (BAF Web portal) ໄດ້ມີການເຄື່ອນໄຫວພາຍໃນສາມເດືອນທຳອິດຂອງການດຳເນີນງານ. ໃນທ້າຍປີ 2020, 691 ບໍລິສັດໄດ້ລົງທະບຽນຢູ່ໃນເວັບໄຊ BAF II, ເພີ່ມຂຶ້ນຈາກ 514 ໃນທ້າຍເດືອນມິຖຸນາ 2020. |
| **ການແກ້ໄຂບັນຫາ** | **2. ການແກ້ໄຂບັນຫາສະເພາະຂອງຂະແໜງການ**<br>**ການປ່ຽນແປງໃນລະດັບຜົນໄດ້ຮັບ:** ການຊ່ວຍໜູນຂະ ແໜງການ ແລະ PPD ໄດ້ເພີ່ມຂຶ້ນເປັນການນຳໄປສູ່ການເພີ່ມການຈ້າງງານແລະລາຍໄດ້ຂອງຜູ້ທຸກຍາກໃນຂະແໜງກະສິກຳ, ອຸດສາຫະກຳປຸງແຕ່ງ ແລະການບໍລິການທີ່ສຳຄັນ.<br>**ບັນດາຕົວຊີ້ວັດ:** | | • LNCCI ແລະບັນດາສະພາອຸດສາຫະກຳ ແລະ ການຄ້າຂັ້ນແຂວງໄດ້ປັບປຸງກົນໄກການປຶກສາຫາລືພາກລັດ-ທຸລະກິດ/ເອກະຊົນ ແລະ BMO ໃນລະດັບຊາດ ແລະ ຂັ້ນແຂວງໃຫ້ດີຂຶ້ນ.<br>• ການປຶກສາຫາລືພາກລັດ ແລະ ເອກະຊົນພາຍໃຕ້ TPSWG, ເຊິ່ງເປັນສ່ວນຫນຶ່ງຂອງ LBF ທີ່ໄດ້ຈັດຂຶ້ນໃນແຕ່ລະປີ, ແມ່ນໄດ້ມີການຈັດເປັນປະຈຳທຸກງວດ. |

| | | |
|---|---|---|
| | • ກົນໄກການປຶກສາຫາລືພາກລັດ-ທຸລະກິດ/ເອກະຊົນ PPD ແລະ BMOs ໃນລະດັບຊາດ ແລະ ຂັ້ນແຂວງ ມີປະສິດທິພາບຫລາຍຂຶ້ນ<br>• ຄວາມຖີ່ຂອງກົນໄກການປຶກສາຫາລືພາກລັດ-ທຸລະກິດ/ເອກະຊົນ (EIF O2.3)<br>• ຈຳນວນຜູ້ທຸກຍາກທີ່ມີລາຍໄດ້ເພີ່ມຂຶ້ນໂດຍຜ່ານໂຄງການພັດທະນາຕະຫຼາດ<br>• ຈຳນວນຊາວກະສິກອນມີຄວາມສາມາດເຂົ້າເຖິງເຕັກໂນໂລຊີກະສິກຳໃໝ່<br>• ການເພີ່ມຂຶ້ນຂອງມູນຄ່າພືດຜົນເປັນ (x) ໂດລາສະຫະລັດ USD ໃນການສົ່ງອອກສິນຄ້າກະສິກຳທີ່ສຳຄັນ<br>• ການເພີ່ມຂຶ້ນຂອງການໃຊ້ຈ່າຍສະເລ່ຍຕໍ່ນັກທ່ອງທ່ຽວ<br>• ຈຳນວນສະຖານທີ່ທ່ອງທ່ຽວທີ່ມີໂຄງການປັບປຸງສັງຄົມ ແລະສິ່ງແວດລ້ອມຢ່າງຕັ້ງໜ້າ<br>• ຈຳນວນຜູ້ຮຽນຈົບຫຼັກສູດວິຊາຊີບ<br>• ການມີບັນດາຍຸດທະສາດຂອງພາກການຜະລິດ (ພາກເສດຖະກິດຈິງ) ສຳລັບຂະແໜງການຫຼັກ (ທີ່ເປັນທ່າແຮງຂອງການພັດທະນາ | • ການອຳນວຍຄວາມສະດວກທາງດ້ານການຄ້າທີ່ດີຂຶ້ນ, ເຊັ່ນດຽວກັນກັບການຍົກເລີກໃບອະນຸຍາດ ນຳເຂົ້າລົດໄຖນາເດີນຕາມສຳລັບການນຳໃຊ້ຂອງຜູ້ຜະລິດລາຍນ້ອຍ, ບວກກັບການຫັນເປັນການຜະລິດກະສິກຳເປັນສິນຄ້າເພີ່ມຂຶ້ນໄດ້ເຮັດໃຫ້ມີຊາວກະສິກອນຈຳນວນຫຼາຍຂຶ້ນທີ່ເຂົ້າເຖິງເຕັກໂນໂລຊີກະສິກຳໃໝ່.<br>• ມູນຄ່າການສົ່ງອອກສິນຄ້າກະສິກຳຕົ້ນຕໍລວມເຂົ້າກັນ (ຢາງພາລາ, ກ້ວຍ, ກາເຟ, ມັນຕົ້ນ, ສາລີ, ເຂົ້າ, ແລະ ໝາກໂມ) ໄດ້ເພີ່ມຂຶ້ນຈາກ 157,6 ລ້ານໂດລາ ໃນປີ 2014 ເປັນຫຼາຍກວ່າ 512 ລ້ານໂດລາ (FAO ແລະ ແຫຼ່ງຂໍ້ມູນອື່ນໆລວມກັນ).<br>• ຈຳນວນ, ການໃຊ້ຈ່າຍສະເລ່ຍ ແລະ ໄລຍະເວລາພັກເຊົາສະເລ່ຍຂອງນັກທ່ອງທ່ຽວຕ່າງປະເທດໄດ້ເພີ່ມຂຶ້ນຈາກ 471.867 ຄົນ, 81 ໂດລາ/ຄົນ/ມື້, ແລະ 7,2 ວັນໃນປີ 2012 ເປັນ 632.297, 83,64 ໂດລາ/ຄົນ/ມື້, ແລະ 7,93 ມື້ໃນປີ 2019 ຕາມລຳດັບ. |

| | | | |
|---|---|---|---|
| | ເສດຖະກິດ) ທີ່ຮວມເອົາວຽກງານການຄ້າເຂົ້າເປັນມິຕິໜຶ່ງແຫ່ງ ການພັດທະນາຂອງຂະແໜງການ (EIF O2.2) | | |
| **ການແກ້ໄຂບັນຫາ** | **ອົງການ** | **ການໃຫ້ທຶນ/ໂຄງການ** | **ຜົນໄດ້ມາໃນປີ 2021 (ການຈັດຕັ້ງປະຕິບັດນັບຕັ້ງແຕ່ 2012/13)** |
| **ທຸລະກິດກະສິກຳ** | | | |
| 1 ສ້າງຍຸດທະສາດການພັດທະນາສະເພາະຜະລິດຕະພັນສຳລັບຜະລິດຕະພັນກະເສດແບບດັ້ງເດີມແລະທີ່ເກີດຂຶ້ນມາໃໝ່ທີ່ໄດ້ລະບຸໄວ້ໃນບົດ DTIS ສະບັບປັບປຸງໃໝ່, ລວມທັງກາເຟ; ຊາ, ສາລີ; ມັນຕົ້ນ; ອ້ອຍ; ຢາງພາລາ, ສັດລ້ຽງ ແລະ ອື່ນໆ | MOIC, MAF | TDF I, EIF II | ໃນປີ 2020, NIU ໄດ້ມອບໝາຍໃຫ້ຊ່ຽວຊານທີ່ປຶກສາເພື່ອສຶກສາກ່ຽວກັບເຂົ້າ, ຜັກ, ກາເຟ, ສັດລ້ຽງ ແລະ ພືດນ້ຳມັນກິນໄດ້, ຈາກນັ້ນກໍໄດ້ມີຂໍ້ສະເໜີແນະກ່ຽວກັບຍຸດທະສາດການພັດທະນາສຳລັບບົດ DTIS ສະບັບປັບປຸງໃໝ່. ອົງການ ITC ໄດ້ສຶກສາ (ເຜີຍແຜ່ໃນເດືອນກຸມພາ 2021) ທ່າແຮງການລົງທຶນສຳລັບ ກາເຟ ແລະ ການປຸງແຕ່ງໄມ້ທີ່ມີຕະຫຼາດສົ່ງອອກທີ່ໄດ້ເລືອກເອົາ ເຊິ່ງສະເໜີໃຫ້ສິດທິປະໂຫຍດດ້ານພາສີ ທີ່ ສປປ ລາວ ສາມາດນຳໃຊ້ເພື່ອດຶງດູດ FDI, ແລະ ກໍໄດ້ມີການຮ່າງແຜນຍຸດທະສາດການສົ່ງອອກກາເຟຂອງ ສປປ ລາວ ໄລຍະ 2021 - 2025. ERIA (ສະຖາບັນຄົ້ນຄ້ວາເສດຖະກິດອາຊຽນ ແລະ ອາຊີຕາເວັນອອກ), ຮ່ວມກັບ MOIC ໄດ້ສຶກສາ ແລະ ໃຫ້ຂໍ້ສະເໜີແນະກ່ຽວກັບຍຸດທະສາດພັດທະນາ (2020-25) ສຳລັບຜະລິດຕະພັນກະສິກຳ ແລະ ການປຸງແຕ່ງສະບຽງອາຫານສະເພາະ ບາງຢ່າງ, ເຊັ່ນດຽວກັນກັບ ເຄື່ອງຕັດຫຍິບ, ການປຸງແຕ່ງໄມ້, ຫັດຖະກຳ ແລະ ງານສິນລະປະທີ່ເຮັດດ້ວຍມື ແລະ ເຕັກໂນໂລຊີຂໍ້ມູນຂ່າວສານ. |

| | | | | |
|---|---|---|---|---|
| 2 | ດຳເນີນການຄົ້ນຄວ້າ ແລະ ເຜີຍແຜ່ເຕັກໂນໂລຊີຫຼັງການເກັບກ່ຽວໃຫ້ຊາວນາຊາວສວນລາຍນ້ອຍ ໂດຍອີງໃສ່ສະພາບເສດຖະກິດ-ສັງຄົມ ແລະ ນິເວດກະສິກຳ ແລະ ວິທີການຖ່າຍທອດເຕັກໂນໂລຊີທີ່ ເໝາະສົມ ແລະ ຝຶກອົບຮົມວິສາຫະກິດທຸລະກິດການກະເສດໃນການຕັ້ງລາຄາໃຫ້ມີຄວາມແຕກຕ່າງ ໂດຍອີງຕາມຄຸນນະ ພາບສິນຄ້າ. | MAF | | ໄດ້ມີການຊ່ວຍເຫຼືອຢ່າງກວ້າງຂວາງໃນຂົງເຂດນີ້ຈາກຜູ້ໃຫ້ທຶນທີ່ສຳຄັນເຊັ່ນ: ADB, IFAD, ທະນາຄານໂລກ, EU, ຝຣັ່ງ, ເຢຍລະມັນ, ແລະອື່ນໆ. |
| 3 | ສ້າງ ແລະ ນຳໃຊ້ມາດຖານການຄັດເລືອກນັກລົງທຶນດ້ານທຸລະກິດກະສິກຳ ລວມທັງຜູ້ຮັບສຳປະທານທີ່ດິນເພື່ອດຶງດູດການລົງທຶນທີ່ມີຄຸນນະພາບ | MAF, MPI, MOIC | | ບໍ່ມີຄວາມຄືບໜ້າໃນຂົງເຂດນີ້. |
| 4 | ສ້າງລະບອບນະໂຍບາຍສົ່ງເສີມທີ່ເໝາະສົມເພື່ອສົ່ງເສີມການເຮັດກະສິກຳແບບມີສັນຍາຜູກພັນສອງສົ້ນລະຫວ່າງນັກລົງ ທຶນລາຍໃຫຍ່ ແລະ ຊາວກະສິກອນລາຍນ້ອຍ | MAF | | DFTP ເຮັດວຽກກ່ຽວກັບຂອບຂ່າຍການຊ່ວຍໜູນພາຍໃນປະເທດສຳລັບທຸລະກິດກະສິກຳ. |

| | | | | |
|---|---|---|---|---|
| 5 | ດຳເນີນການສຶກສາຄວາມເປັນໄປໄດ້ ໃນການສ້າງຕັ້ງສະຖາບັນກາເຟ ເພື່ອແນໃສ່ພັດທະນາບຸກຄະລາກອນວິຊາການລົງເລິກສະເພາະ ເພື່ອຮອງຮັບການພັດທະນາແບບຍືນຍົງຂອງຂະແໜງການນີ້. | MOIC, MAF | EIF II | ສະຖາບັນຄົ້ນຄວ້າກະສິກຳ ແລະ ປ່າໄມ້ແຫ່ງຊາດ, ສິ່ງອຳນວຍຄວາມສະດວກ (ດ້ານທຶນ) ຂອງ ສະມາຄົມມັນຕົ້ນລາວ LCA, ແລະ ຫ້ອງວິໄຈຂອງສູນຄົ້ນຄວ້າກາເຟແມ່ນມີຄວາມສາມາດເຮັດການຄົ້ນຄວ້າກາເຟສະເພາະ. |
| 6 | ອຳນວຍຄວາມສະດວກໃຫ້ແກ່ການຄ້າຊາຍແດນທາງດ້ານສິນຄ້າກະສິກຳ ໂດຍການປັບປຸງໂລຊິດສະຕິກ(ພະລາທິການ)ດ້ານການຄ້າ ໂດຍສະເພາະສູນຈັດຈຳ ໜ່າຍສິນຄ້າຢູ່ດ່ານຊາຍແດນທີ່ສຳຄັນ (ເຊັ່ນ: ຊາຍແດນລາວໄທ ແຂວງຈຳປາສັກ) | MOIC, MAF | EIF II | ບໍ່ມີຄວາມຄືບໜ້າໃນຂົງເຂດນີ້. |
| 7 | ສົ່ງເສີມການສ້າງຕັ້ງສະມາຄົມຜູ້ຜະລິດ/ຜູ້ຄ້າໃນທ້ອງຖິ່ນ ເພື່ອຍົກສູງປະສິດທິພາບຂອງການປຶກສາຫາລືກັບພາກລັດຢູ່ທ້ອງຖິ່ນ ແລະ ຂັ້ນສູນກາງ (ຕົວຢ່າງ: ການສ້າງຕັ້ງສະມາຄົມຜູ້ຜະລິດ/ຜູ້ຄ້າຂາຍ | MOIC, LNCCI | TDF II | LNCCI, ໂດຍໄດ້ຮັບການຮ່ວມມື ແລະ ການຊີ້ນຳຈາກ MOIC, ໄດ້ຊ່ວຍສະພາການຄ້າແຂວງໃນການພັດທະນາຂີດຄວາມສາມາດ ແລະ ການຊ່ວຍເຫຼືອການສ້າງຕັ້ງສະມາຄົມຊາວກະສິກອນເພື່ອເຮັດວຽກກັບສະພາການຄ້າທ້ອງຖິ່ນເຊັ່ນ: LCA, LHA, ແລະ ອື່ນໆ. |

| | | | |
|---|---|---|---|
| ໝາກໄມ້ ແລະ ຜັກສົດຢູ່ພູພຽງບໍລະເວນ ກໍ່ຄວນໄດ້ຮັບການຊຸກຍູ້ສົ່ງເສີມ). | | | |
| 8 ອຳນວຍຄວາມສະດວກໃຫ້ຜູ້ສົ່ງອອກພາຍໃນປະເທດເຂົ້າສູ່ຕະຫຼາດພາກພື້ນ ແລະ ໂລກທີ່ມີມູນຄ່າສູງ ໂດຍການຊຸກຍູ້ສົ່ງເສີມການນຳເອົາມາດຕະຖານອຸດສາ ຫະກຳທີ່ດີທີ່ສຸດທີ່ມີການນຳໃຊ້ຢູ່ບັນດາຕະ ຫຼາດປະເທດເພື່ອນບ້ານທີ່ສຳຄັນ (ຈີນ, ໄທ, ຫວຽດນາມ). | MAF, MOIC | TDF II | ປັດຈຸບັນ, ຜູ້ສົ່ງອອກຂອງລາວແມ່ນພວມໄດ້ຮັບການຢັ້ງຢືນຄຸນນະພາບຜະລິດຕະພັນຈາກປະເທດເພື່ອນບ້ານ (ໄທ, ຫວຽດນາມ). ຫ້ອງວິໄຈກ່ຽວກັບມາດຕະຖານຄຸນນະພາບແລະຄວາມປອດໄພແມ່ນໄດ້ຖືກສ້າງຂຶ້ນແລະປະກອບພະນັກງານເຂົ້າພາຍໃຕ້ DOSM, ເຖິງແມ່ນວ່າພະນັກງານທີ່ມີທັກສະລົງເລິກສະເພາະດ້ານແມ່ນຍັງບໍ່ພຽງພໍ. ໂດຍມີພັນທະຜູກພັນໃນການຈັດຕັ້ງປະຕິບັດດ້ານຄວາມສອດຄ່ອງກັນຂອງອົງການການຄ້າໂລກ ແລະ ອາຊຽນ, ສິ່ງນີ້ຈະຊຸກຍູ້ ສປປ ລາວ ກ້າວໄປສູ່ການບັນລຸມາດ ຕະຖານດ້ານອຸດສາຫະກຳທີ່ດີທີ່ສຸດທີ່ນຳໃຊ້ແລ້ວໃນປະເທດເພື່ອນບ້ານສ່ວນໃຫຍ່. |
| **ຂະແໜງການທ່ອງທ່ຽວ** | | | |
| 1 ປັບປຸງວິທີການໆລາຍງານ ແລະ ການເກັບກຳສະຖິຕິ ໂດຍສະເພາະໃນດ້ານທີ່ພົວພັນກັບ: ການຈ້າງງານທາງກົງ ແລະ ທາງອ້ອມທີ່ກ່ຽວຂ້ອງກັບການທ່ອງທ່ຽວ; ການປະກອບສ່ວນຂອງການທ່ອງທ່ຽວຕໍ່ GDP ລວມເອົາແບບຈຳລອງປັດ | MOICT | | ສະຖິຕິການທ່ອງທ່ຽວແມ່ນໄດ້ເກັບກຳແລະລາຍງານປະຈຳປີໂດຍ MOICT. ຂໍ້ມູນຂ່າວສານໃນບົດລາຍງານປະຈຳປີນີ້ລວມມີຈຳນວນຂອງນັກທ່ອງທ່ຽວທີ່ມາຢ້ຽມຢາມແລະປະເທດທີ່ມາຂອງເຂົາເຈົ້າ, ໄລຍະເວລາທີ່ພັກເຊົາ, ການໃຊ້ຈ່າຍ, ການມີຫ້ອງໃຫ້ພັກ, ອັດຕາການເຂົ້າພັກເຊົາ, ການສຳຫຼວດສະຖານທີ່ໆດຶງດູດນັກທ່ອງທ່ຽວ. ບໍ່ພົບຂໍ້ມູນອື່ນ. |

| | | | | |
|---|---|---|---|---|
| | ໄຈການຜະລິດ/ຜົນຜະລິດ; ຈຳນວນນັກທ່ອງທ່ຽວທີ່ເຂົ້າມາຈາກປະເທດໃນພາກພື້ນ; ພວກທີ່ເດີນທາງມາຈາກຕ່າງແຂວງ, ແລະການໃຊ້ຈ່າຍໂດຍແຍກຕາມຕະຫຼາດ | | | |
| 2 | ເສີມສ້າງການປະກອບຄະນະ ແລະ ຄວາມເປັນສະມາຊິກ ຂອງສະພາການຕະຫລາດທ່ອງທ່ຽວລາວ | MOICT | | ບໍ່ມີຄວາມຄືບໜ້າ. ໃນປັດຈຸບັນ MOICT ກຳລັງທົບທວນຄືນໂຄງສ້າງທີ່ມີຢູ່ແລ້ວ ໂດຍມີ TA ຈາກໂຄງການທີ່ໄດ້ຮັບທຶນຈາກ USAID |
| 3 | ຜັນຂະຫຍາຍອົງປະກອບຂອງໂຄງການຝຶກອົບຮົມເພື່ອການຄ້າໃນສ່ວນຂອງການທ່ອງທ່ຽວແບບຍືນຍົງຂອງອົງການ UNCTAD ໃຫ້ແກ່ບັນດາຜູ້ທີ່ເຄື່ອນໄຫວ ແລະ ບັນດາອົງການຕົ້ນຕໍ ຂອງລັດທີ່ຄຸ້ມຄອງຕາມຂະແໜງການ ໃນລະດັບສູນກາງ ແລະແຂວງ. | MOICT, MOIC | | ບໍ່ໄດ້ເກີດຂຶ້ນ |
| 4 | ອຳນວຍຄວາມສະດວກໃຫ້ແກ່ການລົງ ທຶນຂອງພາກເອກະຊົນໃນຂະແໜງ ການທ່ອງທ່ຽວ ໂດຍຜ່ານ | MOICT | | ບໍ່ມີຄວາມຄືບໜ້າ |

| | | | |
|---|---|---|---|
| ການຮັບຮອງເອົາລະບອບການອອກໃບອະນຸຍາດໃຫ້ແກ່ນັກທຸລະກິດໃນຂະແໜງທ່ອງທ່ຽວທີ່ໂປ່ງໃສກວ່າ. | | | |
| **ຫັດຖະກຳຕໍ່າແຜ່ນ** | | | |
| 1 ສົ່ງເສີມການປະຕິບັດທີ່ດີໃນການຕໍ່າຫູກເພື່ອປັບປຸງຜະລິດຕະພາບ (ການຝຶກອົບຮົມ, ການນໍາໃຊ້ເຄື່ອງກີ່ຕໍາຫູກ / ອຸປະກອນໃຫມ່) | MOIC, LHA | TDF II | ໂຄງການພັດທະນາຊຸມຊົນຫຼາຍໂຄງການ, ລວມທັງໂຄງການ EIF ໄດ້ຈັດໃຫ້ມີການຝຶກອົບຮົມແລະຄໍາແນະນໍາໃຫ້ແກ່ຜູ້ຕໍ່າຫູກ. |
| 2 ປັບປຸງຂີດຄວາມສາມາດໃນການອອກແບບໂດຍຜ່ານການສົ່ງເສີມການສ້າງຕັ້ງໂຮງຮຽນອອກແບບຂອງເອກະຊົນ | MOIC, LHA | TDF II | ດ້ວຍການຊ່ວຍເຫຼືອຈາກ JETRO, ໂຄງການ “ຂອງຂວັນ” ໄດ້ເລີ່ມຂຶ້ນໃນປີ 2015 ເພື່ອປັບປຸງຄວາມສາມາດໃນການອອກແບບຂອງຂະແໜງຫັດຖະກໍາລາວ. ບໍ່ມີຂໍ້ມູນກ່ຽວກັບວ່າ TDF II ໄດ້ມີສ່ວນຮ່ວມນໍາຫຼືບໍ່. |
| 3 ສ້າງຄວາມເຂັ້ມແຂງໃຫ້ສະມາຄົມຫັດຖະ ກໍາລາວ ໃນດ້ານການສະໜັບສະໜູນນະໂຍບາຍ ແລະເຊື່ອມໂຍງກັບການຊຸກຍູ້ສົ່ງເສີມຂະແໜງຫັດຖະກໍາລາວທັງຢູ່ພາຍໃນ ແລະ ຕ່າງປະເທດ. | MOIC, LHA | TDF II | LHA ໄດ້ເຮັດວຽກກ່ຽວກັບເລື່ອງນີ້ໂດຍການຊ່ວຍເຫຼືອຂອງ JETRO ຕັ້ງແຕ່ປີ 2001. ບໍ່ມີຂໍ້ມູນກ່ຽວກັບວ່າ TDF II ໄດ້ມີສ່ວນຮ່ວມນໍາຫຼືບໍ່. |

| | | | | |
|---|---|---|---|---|
| 4 | ສົ່ງເສີມການຜະລິດຜ້າໄໝພາຍໃນ ປະ ເທດ ດ້ວຍການຂະຫຍາຍ ຂອບເຂດຂອງໂຄງການທີ່ມີຢູ່ແລ້ວ ໂດຍນຳໃຊ້ວິທີການຕ່ອງໂສ້ມູນຄ່າ ເພື່ອສົ່ງເສີມການຜະລິດໃນ ທ້ອງຖິ່ນ | MOIC, LHA | TDF II | INGOs ມີການເຄື່ອນໄຫວຂ້ອນຂ້າງຕັ້ງໜ້າຢູ່ໃນພື້ນທີ່ນີ້, ແນວໃດກໍ່ຕາມ, ຍັງບໍ່ປາກົດມີການເພີ່ມຂຶ້ນຂອງການສະໜອງຜ້າໄໝພາຍໃນ. |
| 5 | ສ້າງຍຸດທະສາດການພັດທະນາ ຜ້າໄໝລາວໄລຍະຍາວ | | | ແຜນຍຸດທະສາດການພັດທະນາຫັດຖະກຳແມ່ນໄດ້ລວມເຂົ້າກັນໃນແຜນພັດທະນາແຫ່ງຊາດ 5 ປີ, ແຕ່ບໍ່ມີຄວາມຊັດເຈນ ແລະ ຂາດລາຍລະອຽດທີ່ພຽງພໍ (ລະບຸໄວ້ໃນບົດລາຍງານຂອງ ERIA (ບໍ່ໄດ້ລົງວັນທີ) ໃນປື້ມທີ່ໃຫ້ຊື່ວ່າ "ຍຸດທະສາດການພັດທະນາ **5** ຂະແໜງທີ່ໄດ້ເລືອກເອົາໃນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (2020 – 2025).). |
| **ຂະແໜງຕັດຫຍິບ** | | | | |
| 1 | ສືບຕໍ່ສະໜັບສະໜູນສູນຝຶກອົບຮົມ ແລະ ບໍລິການຕັດຫຍິບ ແລະ ຄົ້ນຄວ້າຂອບເຂດການໃຫ້ບໍລິການ ໃນຂົງເຂດການອອກໃບຢັ້ງຢືນ | MOIC, ALGI | TDF II | TDF II ໄດ້ສະໜັບສະໜູນ GTSC ດ້ວຍໂຄງການໃຫ້ຄຳແນະນຳທີ່ເໝາະສົມກັບລູກຄ້າແລະໂຄງການການຝຶກອົບຮົມມາດຕະຖານສຳລັບຜູ້ຄຸມງານຈາກອຸດສາຫະກຳຕັດຫຍິບແລະຊ່າງຫຍິບຈັກຈາກປະຊາຊົນທົ່ວໄປ. ຢ່າງໃດກໍ່ຕາມ, GTSC ປະເຊີນກັບສິ່ງທ້າທາຍໃນຄວາມຍືນຍົງທາງດ້ານການເງິນຈາກຄ່າບໍລິການທີ່ໄດ້ຮັບເນື່ອງຈາກ "ຄວາມມີຂະໜາດນ້ອຍຂອງອຸດສາຫະກຳຕັດຫຍິບທີ່ຕັ້ງຢູ່ຫ່າງກັນແບບກະແຈກກະຈາຍຫຼາຍ". |

| | | | | |
|---|---|---|---|---|
| 2 | ຍົກສູງພາບພົດທາງດ້ານອຸດສາຫະກຳແລະການພົວພັນທາງດ້ານອຸດສາຫະກຳດ້ວຍການຈັດຕັ້ງປະຕິບັດບັນດາອົງປະກອບທີ່ກ່ຽວຂ້ອງຂອງໂຄງການໂຮງງານທີ່ດີກວ່າຂອງກຳປູເຈຍ | MOIC, ALGI | TDF II | TDF II ໄດ້ໃຫ້ການຊ່ວຍເຫຼືອດ້ານວິຊາການສຳລັບການປັບປຸງມາດຕະຖານແຮງງານ ແລະສຳລັບການພັດທະນາຂີດຄວາມສາມາດໃນການກວດກາແຮງງານຂອງ MOLWs ທີ່ຈຳເປັນເພື່ອປັບປຸງເງື່ອນໄຂການອອກແຮງງານໃນໂຮງງານ. ສະພາບການເຮັດວຽກດັ່ງກ່າວສ່ວນໃຫຍ່ໄດ້ຮັບການປັບປຸງໃນບັນດາໂຮງງານທົດລອງ 12 ແຫ່ງ. |
| 3 | ສະໜັບສະໜູນຜູ້ຜະລິດເພື່ອຕອບສະ ໜອງຄວາມຕ້ອງການດ້ານຄຸນນະພາບແລະມາດຕະຖານສັງຄົມທີ່ເພີ່ມຂຶ້ນ (ການສະໜັບສະໜູນການປັບປຸງລະບົບຄຸນນະພາບ (ISO), ໂຄງການການຍັ້ງຢືນ (WRAP, SA 8000)) | MOIC, ALGI | TDF II | ການຮັບຮອງເອົາຂໍ້ຕົກລົງ ຂອງລັດຖະມົນຕີ ເລກທີ 4277 ທີ່ກຳນົດໃຫ້ນຳໃຊ້ລາຍການກວດກາແຮງງານ, ການນຳເອົາຊຸດເຄື່ອງມືກວດກາແຮງງານມາໃຊ້ໂດຍມີຂໍ້ມູນຂ່າວສານໃນ 7 ຂົງເຂດເນື້ອໃນຫຼັກຂອງກົດໝາຍວ່າດ້ວຍແຮງງານ ໄດ້ສ້າງພື້ນຖານທີ່ເປັນລະບົບອັນໜັກແໜ້ນເພື່ອປັບປຸງວຽກງານກວດກາ ແລະ ການປະຕິບັດຕາມກົດໝາຍແຮງງານ. ຢ່າງໃດກໍ່ຕາມ, ເງື່ອນໄຂການເຮັດວຽກແມ່ນສາມາດປັບປຸງຕື່ມອີກ. |
| 4 | ສືບຕໍ່ພະຍາຍາມຫຼຸດຜ່ອນຕົ້ນທຶນຄ່າໃຊ້ຈ່າຍລວມຂອງການດຳເນີນທຸລະກິດໂດຍວິທີ:<br>○ ການທົບທວນຄືນລະບອບຈັດເກັບລາຍຮັບທີ່ມີຢູ່ ການປັບປຸງວຽກງານໂລຊິດສະຕິກ ແລະ ການອຳນວຍ | MOIC, ALGI | TDF II | ໄດ້ດຳເນີນການໂດຍການເຮັດໃຫ້ຂັ້ນຕອນການແຈ້ງພາສີຢູ່ດ່ານຊາຍແດນມີຄວາມສະດວກວ່ອງໄວ. ຢ່າງໃດກໍຕາມ, ເຈົ້າຂອງຜູ້ສົ່ງສິນຄ້າໄດ້ມີການຈົ່ມວ່າກ່ຽວກັບການບັງຄັບໃຊ້ລະບຽບວິທີປະຕິບັດງານທີ່ບໍ່ລົງຕົວກັນ. |

| | | | |
|---|---|---|---|
| ຄວາມສະດວກທາງດ້ານການຄ້າ (ການຫຼຸດຜ່ອນຄ່າຂົນສົ່ງທາງບົກລະຫວ່າງວຽງຈັນ ແລະ ທ່າເຮືອບາງກອກ ແລະ ຄ່າໃຊ້ຈ່າຍທີ່ກ່ຽວຂ້ອງກັບການແຈ້ງພາ ສີ ຢູ່ດ່ານພາສີຊາຍແດນ); ທົບ ທວນຄືນກົດໝາຍວ່າດ້ວຍແຮງງານ | | | |
| 5 ສ້າງຍຸດທະສາດພັດທະນາຂະແໜງການໄລຍະກາງ ຫາຍາວ | | | ການສຶກສາໂດຍ ERIA, *ຍຸດທະສາດການພັດທະນາຂອງ 5 ຂະແໜງການທີ່ເລືອກເອົາໃນສາທາລະ ນະລັດ ປະຊາທິປະໄຕ ປະຊາຊົນລາວ (2020 – 2025),* ໃຫ້ຂໍ້ສະເໜີແນະກ່ຽວກັບຍຸດທະສາດການພັດທະນາເຄື່ອງຕັດຫຍິບ, ການປຸງແຕ່ງກະສິກຳ ແລະ ສະບຽງອາຫານ, ການປຸງແຕ່ງໄມ້, ຫັດຖະກຳ ແລະ ງານສິນລະປະທີ່ເຮັດດ້ວຍມື ແລະ "ເຕັກໂນໂລຊີຂໍ້ມູນຂ່າວສານເພື່ອໃຫ້ມີການນຳໃຊ້ໄຟຟ້າລາຄາຖືກຢ່າງຫລວງຫລາຍ." |
| **ອຸດສາຫະກຳປຸງແຕ່ງໄມ້** | | | |
| 1 ການປັບປຸງຄວາມພ້ອມ ແລະ ການປະຕິ ບັດໃຫ້ຖືກຕາມລະບຽບການໄມ້ຂອງສະ ຫະພາບເອີຣົບ ແລະ ລະບົບການຮັບປະ ກັນດ້ານ | MOIC, ບັນດາ ສະມາຄົມ | TDF II | ອົງການໄຈກາ ໄດ້ສະໜັບສະໜູນບໍລິສັດ ຍີ່ປຸ່ນ 2 ບໍລິສັດ ເພື່ອເຜີຍແຜ່ ແລະ ສາທິດໃຫ້ເຫັນເຕັກໂນໂລຊີ ຂອງປຸງແຕ່ງໄມ້ ແລະ ຂອງການເຮັດເຄື່ອງເຟີນີເຈີຂອງເຂົາເຈົ້າ ເພື່ອຍົກສູງຜະລິດຕະພັນໄມ້ຂອງ ສປປ ລາວ ໃຫ້ "ເປັນທີ່ຍອມຮັບ |

| | | | | |
|---|---|---|---|---|
| | ຄວາມຖືກຕ້ອງຕາມກົດໝາຍຂອງໄມ້ ໂດຍການສົ່ງເສີມລະບົບການຢັ້ງຢືນທາງດ້ານອຸດສາຫະກຳ (FSC CoC, ISO 9001, 14001 ແລະອື່ນໆ). | | | ຂອງຕະຫຼາດໂລກ ລວມທັງຍີ່ປຸ່ນ". ບໍ່ມີຂໍ້ມູນກ່ຽວກັບວ່າ TDF II ໄດ້ມີສ່ວນຮ່ວມຫຼືບໍ່. |
| 2 | ອຳນວຍຄວາມສະດວກໃນການສ້າງຕັ້ງການເປັນຄູ່ຮ່ວມຍຸດທະສາດລະຫວ່າງບັນ ດາໂຮງງານປຸງແຕ່ງໄມ້ຂອງລາວ ແລະ ໂຮງງານປຸງແຕ່ງໄມ້ຊັ້ນນຳໃນປະເທດເພື່ອນບ້ານ ເພື່ອປັບປຸງຜະລິດຕະພາບຂອງໂຮງງານປຸງແຕ່ງໄມ້ຂອງ ສປປ ລາວ. | MOIC, ບັນດາ ສະມາຄົມ | TDF II | "ໂຄງການເຜີຍແຜ່ ແລະສາທິດການສົ່ງເສີມການສົ່ງອອກຈາກ ສປປ ລາວ ທີ່ນຳໃຊ້ເຕັກໂນໂລຊີປຸງແຕ່ງໄມ້ຈາກຍີ່ປຸ່ນ" ໄດ້ນຳເອົາສອງບໍລິສັດຍີ່ປຸ່ນ (Takada Seizaisho ແລະ Legnatec) ໂດຍໄດ້ຮັບການສະໜັບສະໜູນຈາກອົງການໄຈກາເພື່ອຮ່ວມມືກັບບັນດາບໍລິສັດພາຍໃນປະເທດ ສຳລັບການປຸງແຕ່ງໄມ້ ແລະ ເຟີນິເຈີຢູ່ ສປປ ລາວ. ບໍ່ມີຂໍ້ມູນກ່ຽວກັບວ່າ TDF II ໄດ້ມີສ່ວນຮ່ວມຫຼືບໍ່. |
| 3 | ອຳນວຍຄວາມສະດວກໃນການເຂົ້າເຖິງແຫຼ່ງທຶນໝູນວຽນຂອງໂຮງງານປຸງແຕ່ງໄມ້ຂັ້ນສອງ ເພື່ອເພີ່ມມູນຄ່າເພີ່ມຂອງການສົ່ງອອກໄມ້ | MOIC, ບັນດາ ສະມາຄົມ | TDF II | ໂດຍການໃຫ້ທຶນຈາກ EU ແລະ JICA, ອົງການ ITC ກຳລັງເຮັດວຽກກັບໂຮງງານປຸງແຕ່ງໄມ້ເພື່ອປັບປຸງຜະລິດຕະພາບຂອງເຂົາເຈົ້າ, ເຊິ່ງໃນທີ່ສຸດອາດຈະເປັນການປັບປຸງການເຂົ້າເຖິງທຶນໝູນວຽນທີ່ຈຳເປັນ. |
| 4 | ດຳເນີນການປະເມີນຜົນການປູກພືດຢືນຕົ້ນໃນສວນປູກຂະໜາດໃຫຍ່ທັງໝົດຕາມຂະນິດ ແລະ ດຳ | MAF, MONRE | SUFORD | ທະນາຄານໂລກ ແລະ KFW ໄດ້ດຳເນີນການຈັດຫາທຶນໃຫ້ບັນດາກິດຈະກຳຕ່າງໆໃນຂົງເຂດນີ້. |

| | | | | |
|---|---|---|---|---|
| | ເນີນການພະຍາກອນການຜະລິດ ໂດຍໃຫ້ຮູ້ບໍລິມາດທີ່ຄາດວ່າຈະ ເກັບກູ້ໄດ້ຕາມຂະໜາດ ຫຼື ເສັ້ນ ຜ່າສູນກາງໃນໄລຍະ 5 ປີ ເຖິງປີ 2020. | | | |
| 5 | ຜ່ອນຜັນຊົ່ວຄາວ ແລະ ແບບມີ ກຳນົດການຫ້າມການລົງທຶນຂອງ ຕ່າງປະເທດໃນການປຸງແຕ່ງໄມ້ ຂັ້ນສອງທີ່ອີງໃສ່ປ່າທຳມະຊາດ | MAF, MONRE | SUFOR D | ບໍ່ມີຄວາມຄືບໜ້າ |
| 6 | ປັບປຸງ ແລະ ຂະຫຍາຍລະບົບ ການປະ ມູນທີ່ມີການແຂ່ງຂັນກັນ ໃນການຈັດສັນໂກຕາໄມ້ທ່ອນ | MAF, MOIC, MONRE | SUFOR D | ການຕັດໄມ້ໄດ້ຖືກຫ້າມໃນໄລຍະສອງສາມປີຜ່ານມາ. |
| **ຂົງເຂດ ການແກ້ໄຂ ບັນຫາ 2.3** | **3. ການໃຊ້ປະໂຫຍດ ຈາກການຂະຫຍາຍ ຕົວຢ່າງໄວວາ ຂອງການຂຸດຄົ້ນຊັບພະຍາກອນ** **ການປ່ຽນແປງໃນລະດັບຜົນໄດ້ຮັບ:** ອຸດສາຫະກຳ ທີ່ແຕກສາຂາອອກໂດຍພັດທະນາມາຈາກອຸດ ສາຫະກຳບໍ່ແຮ່ແລະໄຟຟ້ານ້ຳຕົກ<br>**ບັນດາຕົວຊີ້ວັດ:**<br>• ລະບົບນະໂຍບາຍສົ່ງເສີມເຂົ້າທີ່ເຂົ້າທາງແລະ | | | • ລະບົບນະໂຍບາຍສົ່ງເສີມສຳລັບບໍລິສັດທີ່ຂຸດຄົ້ນຊັບພະຍາກອນເປັນພື້ນຖານ ເພື່ອໃຫ້ການຝຶກອົບຮົມໃນວຽກງານຕົວຈິງໃນດ້ານການບໍລິການສະໜັບສະໜູນ ແມ່ນສ່ວນໜຶ່ງທີ່ບໍ່ແຍກອອກຂອງໂຄງການໂຮງຮຽນວິຊາຊີບທີ່ ສະໜັບສະໜູນໂດຍ ADB, SDC ແລະ ເຢຍລະມັນ. |

| | | |
|---|---|---|
| | ໃຊ້ງານໄດ້ສໍາລັບບັນດາບໍລິສັດທີ່ຂຸດຄົ້ນ ຊັບພະຍາກອນເປັນພື້ນຖານ ເພື່ອໃຫ້ການຝຶກອົບຮົມໃນວຽກງານຕົວຈິງໃນດ້ານການບໍລິການສະໜັບສະໜູນ<br>• ຈໍານວນຄົນທີ່ເຮັດວຽກຢູ່ໃນອຸດສາຫະກໍາທີ່ແຕກສາ ຂາອອກມາ ໄດ້ຖືກແບ່ງແຍກອອກຕາມເງື່ອນໄຂມາດຖານຂອງຄວາມບອບບາງ | |

| ການແກ້ໄຂບັນຫາ | ອົງການ | ການໃຫ້ທຶນ/ ໂຄງການ | ຜົນໄດ້ມາ ໃນປີ 2021 (ການຈັດຕັ້ງປະຕິບັດນັບຕັ້ງແຕ່ 2012/13) |
|---|---|---|---|
| 1 ດໍາເນີນການສຶກສາກ່ຽວກັບໂອກາດໃນການເພີ່ມມູນຄ່າໃຫ້ແກ່ອຸດສາຫະກໍາບໍ່ແຮ່ | MOIC, MEM | | ບໍ່ມີຄວາມຄືບໜ້າ |
| 2 ຈັດໃຫ້ມີການຝຶກອົບຮົມດ້ານວິຊາການ ແລະ ວິຊາຊີບໃຫ້ແກ່ອຸດສາຫະກໍາບໍລິການທີ່ສະໜັບສະໜູນອຸດສາຫະກໍາບໍ່ແຮ່ ແລະໄຟຟ້າພະລັງນໍ້າ | MOIC, MEM | | ADB, SDC ແລະເຢຍລະມັນໄດ້ມີຄວາມຕັ້ງໜ້າຫ້າວຫັນຫຼາຍໃນການຍົກລະດັບລະບົບການສຶກສາວິຊາຊີບ, ເຊິ່ງອາດສາມາດກວມເອົາອຸດສາຫະກໍາການບໍລິການທີ່ໄດ້ເລືອກເອົາສໍາລັບຂະແໜງການຂຸດຄົ້ນບໍ່ແຮ່ ແລະໄຟຟ້ານໍ້າຕົກໄດ້ ເຊັ່ນກັນ. |

| | | | | |
|---|---|---|---|---|
| 3 | ພັດທະນາລະບົບນະໂຍບາຍ ສົ່ງເສີມສຳລັບບໍລິສັດທີ່ຂຸດຄົ້ນ ຊັບພະຍາກອນເປັນພື້ນຖານເພື່ອ ໃຫ້ການຝຶກອົບຮົມໃນການເຮັດ ວຽກຕົວຈິງໃນດ້ານການບໍລິການ ສະໜັບສະໜູນ | MEM, MOF, MOIC | | ກຳລັງມີຄວາມພະຍາຍາມ ພາຍໃຕ້ບັນດາໂຄງການທີ່ໄດ້ກ່າວມາຂ້າງເທິງນີ້. |
| 4 | ຈັດຕັ້ງປະຕິບັດໂຄງການທົດລອງ BDS ສຳລັບກິດຈະກຳທີ່ແຕກ ສາຂາອອກມາ | MOIC | | ບໍ່ມີຄວາມຄືບໜ້າ |

| | | |
|---|---|---|
| **ຜົນໄດ້ມາຂອງເສົາຄ້ຳທີ 3** | **ຂອບຂ່າຍການຄຸ້ມຄອງໂຄງການຊ່ວຍເຫລືອດ້ານການຄ້າ ໄດ້ຮັບການປັບປຸງດີຂຶ້ນເພື່ອເຊື່ອມສານວຽກງານການພັດທະນາການຄ້າ ແລະ ພາກທຸລະກິດ/ເອກະຊົນ(ເຂົ້າໃນກະແສລວມຂອງການພັດທະນາ)** | |
| **ຂົງເຂດການແກ້ໄຂບັນຫາ 3.1** | 1. **ການຄ້າແບບຍືນຍົງ**<br><br>**ການປ່ຽນແປງໃນລະດັບຜົນໄດ້ຮັບ:** ການເຕີບໂຕດ້ານການຄ້າເປັນຜົນດີຕໍ່ຄົນທຸກຍາກຍ້ອນມີການເຊື່ອມໂຍງເຂົາເຈົ້າເຂົ້າໃນຂະບວນການຜະລິດໂດຍມີການ ລວມເອົາ ແລະ ແກ້ໄຂຢ່າງເປັນລະບົບຂໍ້ພິຈາລະນາຕ່າງໆທາງດ້ານບົດບາດຍິງ-ຊາຍ, ຄວາມທຸກຍາກ ແລະ ສິ່ງແວດລ້ອມ ໃນຂະແໜງການ.<br><br>**ບັນດາຕົວຊີ້ວັດ:**<br>• ບັນດານະໂຍບາຍ TPSD ມີການແຈ້ງບອກເປັນຢ່າງດີ ແລະ ສະໜອງຕອບຕໍ່ຄວາມທຸກຍາກ, ບົດບາດຍິງ-ຊາຍເພດ ແລະ ສິ່ງແວດລ້ອມ<br>• ການມີສ່ວນຮ່ວມຂອງແມ່ຍິງໃນເສດຖະກິດ ເຮັດໄດ້ດີຂຶ້ນ(ວັດແທກໂດຍການເພີ່ມຂຶ້ນຂອງຊັດສ່ວນທຸລະກິດທີ່ແມ່ຍິງເປັນເຈົ້າຂອງ (ES)) | • ໃນໄລຍະປີ 2013-2020, ການຂຶ້ນທະບຽນທຸລະກິດພາຍໃນທີ່ແມ່ຍິງເປັນເຈົ້າຂອງ ໄດ້ເພີ່ມຂຶ້ນ 38.244 ຫົວໜ່ວຍ, ກວມເອົາ 46,8% ຂອງການຂຶ້ນທະບຽນທຸລະກິດຂອງຄົນພາຍໃນທັງໝົດ (MOIC).<br>• ແມ່ຍິງກວມເອົາ 46% ຂອງພະນັກງານເຮັດວຽກເຕັມເວລາໃນປີ 2018, 43% ຂອງວິສາຫະກິດແມ່ນມີຜູ້ຈັດການສູງສຸດເປັນຜູ້ຍິງ , ແລະ 36% ມີຜູ້ຍິງເຂົ້າຮ່ວມໃນການເປັນເຈົ້າຂອງວິສາຫະກິດ (WB ES 2018) |

| | | |
|---|---|---|
| | • ອັດຕາສ່ວນຮ້ອຍຂອງພະນັກງານຍິງເຮັດວຽກເຕັມເວລາ (ES)<br>• ການນຳໃຊ້ວິທີການເຮັດໃຫ້ຕະຫຼາດເຄື່ອນໄຫວສິ່ງຜົນດີໃຫ້ແກ່ຜູ້ທຸກຍາກໃນການອອກແບບກິດຈະກຳ<br>• ຂໍ້ສະເໜີການລົງທຶນຈາກຕ່າງປະເທດ ແລະ ພາຍໃນປະເທດທີ່ເລືອກໃຊ້ວິທີການ'ພື້ນຖານຕ່ຳສຸດສາມຢ່າງ' (ຄືການຄຳນຶງເຖິງ ປະຊາຊົນ, ໂລກທີ່ເຮົາຢູ່ອາໄສ ແລະ ຄວາມວັດທະນະຖາວອນ) ໃນການລົງທຶນ | |

| | ການແກ້ໄຂບັນຫາ | ອົງການ | ການໃຫ້ທຶນ/ໂຄງການ | ຜົນໄດ້ມາ ໃນປີ 2021 (ການຈັດຕັ້ງປະຕິບັດນັບຕັ້ງແຕ່ 2012/13) |
|---|---|---|---|---|
| 1 | ໃຫ້ລວມເອົາບັນດາຫຼັກການທີ່ເຮັດໃຫ້ຕະຫຼາດມີການເຄື່ອນໄຫວເພື່ອຜົນປະໂຫຍດຂອງຄົນທຸກຍາກ (M4P) (ການພັດທະນາລະບົບຕະຫລາດ) ໃນການສ້າງ ແລະ ຈັດຕັ້ງປະຕິບັດບັນດາມາດຕະການຊ່ວຍໜູນຂະແໜງການ ເປັນອັນສະເພາະ ເພື່ອແນໃສ່ເສີມຂະຫຍາຍຜົນກະທົບຕໍ່ການແກ້ໄຂຄວາມທຸກຍາກ. | MOIC | TDF II | ໂຄງການກອງທຶນການເງິນຈຸນລະພາກ, ເຊິ່ງເຮັດວຽກກັບ 4 ສະຖາບັນການເງິນຈຸນລະພາກ MFIs ທີ່ເລືອກໄດ້ເອົາ ແມ່ນໄດ້ກຽມເອົາໄວ້ເພື່ອສຳລັບທັງຈຸນລະວິສາຫະກິດ ແລະ ວິສາຫະກິດຂະໜາດນ້ອຍທີ່ໄດ້ຂຶ້ນທະບຽນ ແລະ ບໍ່ໄດ້ຂຶ້ນທະບຽນ ເຊິ່ງມີສ່ວນຮ່ວມໃນການປູກພືດ, ການລ້ຽງສັດ, ແລະ ອຸດສາຫະກຳຄົວເຮືອນ. |

| | | | | |
|---|---|---|---|---|
| 2 | ປະຕິບັດການແກ້ໄຂບັນຫາສະເພາະດ້ານບົດບາດຍິງ-ຊາຍໃນຂະແໜງການທີ່ມີແມ່ຍິງກວມເປັນສ່ວນໃຫຍ່ຄື: ຂະແໜງການທຸລະກິດກະສິກຳ, ການທ່ອງທ່ຽວ, ຫັດຖະກຳຕ່ຳແຜ່ນ ແລະ ເຄື່ອງຕັດຫຍິບ. | MOIC, Assoc. | TDF II | ທີ່ປຶກສາດ້ານບົດບາດຍິງ-ຊາຍ ຂອງ NIU ໄດ້ສຳເລັດການຮ່າງຍຸດທະສາດບົດບາດຍິງ-ຊາຍສຳລັບໂຄງການ LCT. ແຜນປະຕິບັດງານວຽກງານບົດບາດຍິງ-ຊາຍສຳລັບ LTC ໄດ້ເປີດຕົວຢ່າງເປັນທາງການໃນກອງປະຊຸມ TPSWG ຄັ້ງທຳອິດທີ່ຈັດຂຶ້ນໃນເດືອນມິຖຸນາ 2020. ການແກ້ໄຂບັນຫາສະເພາະດ້ານບົດບາດຍິງ-ຊາຍ ແມ່ນໄດ້ສ່ອງແສງໃຫ້ເຫັນຢູ່ໃນການໃຫ້ທຶນສົມທົບຊ່ວຍເຫຼືອລ້າທີ່ອະນຸມັດໂດຍ NIU ຈຳນວນ 112 ຫົວໜ່ວຍທຸລະກິດພາຍໃຕ້ BAF II, ເຊິ່ງ 68 ຫົວໜ່ວຍ (ຫຼື 60,7%) ແມ່ນທຸລະກິດແມ່ຍິງເປັນເຈົ້າຂອງ, ໂດຍມີມູນຄ່າການຊ່ວຍເຫຼືອລວມທັງຫມົດ $466.769 ຫຼື 51,9% ໃນມູນຄ່າທັງໝົດຂອງ ການຊ່ວຍເຫຼືອລ້າທີ່ໄດ້ຮັບການອະນຸມັດ $900.000. |
| 3 | ຊຸກຍູ້ສົ່ງເສີມການລົງທຶນໃນວິສາຫະກິດຍິງທີ່ເລີ່ມຕົ້ນໃໝ່(ສະຕາດອັບ) ແລະ ກຳລັງຂະຫຍາຍຕົວໂດຍເລັ່ງເປົ້າໝາຍໃສ່ການຝຶກອົບຮົມດ້ານຄວາມເປັນຜູ້ປະກອບການໃຫ້ແກ່ຂະແໜງການທີ່ໄດ້ເລືອກເອົາທີ່ໄດ້ກ່າວມາຂ້າງເທິງ ເຊິ່ງມີແມ່ຍິງກວມເປັນສ່ວນໃຫຍ່. | MOIC, LWU | TDF II | TDF II ໄດ້ເຮັດວຽກກັບ LWU ກ່ຽວກັບການສົ່ງເສີມວິສາຫະກິດທີ່ແມ່ຍິງເປັນເຈົ້າຂອງ ຫຼື ເປັນຜູ້ນຳພາ. ໂຄງການພັດທະນາ SME ສ່ວນໃຫຍ່ໄດ້ປະສົບຜົນສຳເລັດໃນການເຊື່ອມສານວຽກງານບົດບາດຍິງຊາຍເຂົ້າໃນການແກ້ໄຂບັນຫາຂອງໂຄງການ. |

| | | | | |
|---|---|---|---|---|
| 4 | ເຮັດວຽກກັບບັນດາສະຖາບັນການເງິນຈຸລະພາກທີ່ເລືອກເຟັ້ນ ເພື່ອໃຫ້ຜູ້ປະກອບການສາມາດເຂົ້າເຖິງໄດ້ເພີ່ມຂຶ້ນ ໃນຂະແໜງການຍ່ອຍທີ່ກ່າວມາຂ້າງເທິງ, ໂດຍອຳນວຍຄວາມສະດວກໃນການເຊື່ອມສາຍພົວພັນລະຫວ່າງອົງການ ຈັດຕັ້ງ ແລະ ຜູ້ປະກອບການເຫລົ່ານີ້ໃນຂະ ແໜງການດັ່ງກ່າວ. | BoL, MOIC | | ໄດ້ຄັດເລືອກເອົາ MFI 4 ແຫ່ງ ພາຍໃຕ້ DOSMEP, ເຊິ່ງໄດ້ລິເລີ່ມ ໃນຕົ້ນປີ 2019 ແລະ ເລີ່ມຕົ້ນໃນຕົ້ນປີ 2020; ແຕ່ລະແຫ່ງໄດ້ຮັບທຶນ 500 ລ້ານກີບ, ບວກກັບການຊ່ວຍເຫຼືອດ້ານວິຊາການ (ການຝຶກອົບຮົມ) 40 ລ້ານກີບ. ການປູກພືດ, ການລ້ຽງສັດ ແລະ ອຸດສາຫະກຳຄົວເຮືອນ, ທັງວິສາ ຫະກິດທີ່ຂຶ້ນທະບຽນແລະບໍ່ໄດ້ຂຶ້ນທະບຽນແມ່ນມີສິດໄດ້ຮັບທຶນຈາກສະຖາບັນເຫລົ່ານີ້.<br>ກອງທຶນດັ່ງກ່າວມີສະພາບໍລິການຈາກສີ່ກະຊວງ + LNCCI, ເຊິ່ງມີການຈັດປະຊຸມກັນທຸກໆສາມເດືອນແລະມີທັງກອງປະຊຸມປະຈຳປີ; ການປະຊຸມສະເພາະກິດກໍ່ແມ່ນສາມາດຈັດໄດ້—ໃນປີ 2020 ໄດ້ດຳເນີນກອງປະຊຸມປະຈຳໄຕມາດທັງໝົດສີ່ຄັ້ງບວກກັບກອງປະຊຸມປະຈຳປີ. ກອງເລຂາກໍ່ໄດ້ປະຕິບັດວຽກຢ່າງມີປະສິດທິຜົນ; ສະພາບໍລິຫານຕ້ອງເປັນຜູ້ອະນຸມັດຮັບຮອງເອົາທຸກມະຕິກອງປະຊຸມ; ການກວດສອບພາຍໃນກໍ່ແມ່ນສິ່ງທີ່ຈຳເປັນ. |
| 5 | ນຳເອົາວິທີການ 'ພື້ນຖານຕ່ຳສຸດສາມຢ່າງ' (ຄືການຄຳນຶງເຖິງປະຊາຊົນ, ໂລກທີ່ເຮົາຢູ່ອາໄສ ແລະ ຄວາມວັດທະ ນະຖາວອນ) ມາໃຊ້ ເຊິ່ງສົ່ງເສີມຜົນກະທົບທາງບວກດ້ານສັງຄົມ ແລະສິ່ງ ແວດລ້ອມ ໃນເວລາດຽວກໍ່ມີການຊອກ | MOIC, MAF | | DOSMEP ໄດ້ດຳເນີນວຽກໃນວິທີການ 'ພື້ນຖານຕ່ຳສຸດສາມຢ່າງ' ທີ່ສົ່ງເສີມຜົນກະທົບທາງບວກດ້ານສັງຄົມແລະສິ່ງແວດລ້ອມ, ເຊິ່ງຈະໄດ້ເອົາໄປລວມເຂົ້າໃສ່ໃນແຜນການພັດທະນາ 2021 – 2025. |

| | | | |
|---|---|---|---|
| ສະ ແຫວງຫາຜົນຕອບແທນທາງດ້ານການເງິນໃນໂຄງການລົງທຶນຂະໜາດໃຫຍ່. | | | |
| 6 ສ້າງກົດໝາຍວ່າດ້ວຍການຄວບຄຸມສານເຄມີ ແລະ ວັດຖຸທາດທີ່ອັນຕະລາຍ ເພື່ອບັນເທົາຄວາມສ່ຽງຈາກການດຳເນີນງານຂອງອຸດສາຫະກຳເຄມີທີ່ມີມົນລະພິດ. | MOIC | | DOSMEP ໄດ້ເຮັດວຽກກັບ MONRE ກ່ຽວກັບກົດໝາຍ ແລະ ລະບຽບການຕ່າງໆ ເພື່ອປົກປັກຮັກສາສິ່ງແວດລ້ອມຈາກສານເຄມີ ແລະ ວັດຖຸທາດທີ່ອັນຕະລາຍທີ່ໃຊ້ໃນການຜະລິດ ລວມທັງຜົນກະທົບຕໍ່ສິ່ງແວດລ້ອມອື່ນໆ ຈາກຂະບວນການຜະລິດ. |
| 7 ເພີ່ມທະວີການຮ່ວມມືລະຫວ່າງກະຊວງ MOIC ແລະ MAF ເພື່ອແກ້ໄຂບັນຫາທີ່ກ່ຽວຂ້ອງດ້ານການຄ້າ ແລະ ການລົງທຶນເຊິ່ງແຕ່ລະກະຊວງມີຄວາມກັງວົນ ໂດຍມີການແຕ່ງຕັ້ງຄະນະເຮັດວຽກຂັ້ນສູງນຳກັນ. | MOIC, MAF | TDF II | ໂຄງສ້າງການປະສານງານຢ່າງເປັນທາງການບໍ່ໄດ້ຖືກສ້າງຕັ້ງຂຶ້ນ |
| **ຂົງເຂດການແກ້ໄຂບັນຫາ 3.2** | **2. ການພັດທະນາຂີດຄວາມສາມາດ**<br>**ການປ່ຽນແປງໃນລະດັບຜົນໄດ້ຮັບ:** ຂີດຄວາມສາມາດຂອງການຈັດຕັ້ງ ແລະ ການບໍລິຫານງານທີ່ພຽງພໍໄດ້ຮັບການສ້າງຂຶ້ນເພື່ອຈະວາງແລະຈັດຕັ້ງປະຕິບັດຍຸດທະສາດ ແລະແຜນການຈັດຕັ້ງປະຕິບັດ ທີ່ກ່ຽວກັບການຄ້າ (EIF ຜົນໄດ້ຮັບ 1) | | • ພະນັກງານຂັ້ນວິຊາການ ແລະ ຂັ້ນກາງ 265 ຄົນ, ຍິງ 79 ຄົນ, ຈາກບັນດາອົງການຊາຍແດນທີ່ກ່ຽວຂ້ອງ ທັງສູນກາງ ແລະ ຂັ້ນແຂວງ ໄດ້ຮັບການຝຶກອົບຮົມ ພາຍໃຕ້ໂຄງການສ້າງຂີດຄວາມສາມາດໃນການອຳນວຍຄວາມສະດວກທາງດ້ານການຄ້າ. ນອກນີ້, ຄູຝຶກລະດັບຊາດ 6 ທ່ານຍັງໄດ້ຮັບການຝຶກ |

| | | |
|---|---|---|
| | **ບັນດາຕົວຊີ້ວັດ:**<br>• ວິໄສທັດຮ່ວມກັນກ່ຽວກັບການສະໜັບສະໜູນການພັດທະນາການຄ້າໃນ ສປປ ລາວ ລະຫວ່າງບັນດາພາກສ່ວນທີ່ມີສ່ວນໄດ້ສ່ວນເສຍຂອງພາກລັດ ແລະ ເອກະຊົນ ແລະ ຄູ່ຮ່ວມພັດທະນາ (ບົດ DTIS ແລະ ແຜນຕາຕະລາງກິດຈະກຳ Action Matrix ໄດ້ສ້າງສຳເລັດ ແລະ ທົບທວນເປັນໄລຍະ)[1] (EIF O1.2)<br>• ຍຸດທະສາດການຄ້າທີ່ມີຄຸນນະພາບ ແລະທັນສະພາບປັດຈຸບັນໄດ້ຖືກສ້າງຂື້ນ ແລະຈັດຕັ້ງປະຕິບັດ (EIF O1.4; O1.6)<br>• ຈຳນວນຄົນທີ່ໄດ້ຮັບການຝຶກອົບຮົມໃນຂົງເຂດທີ່ກ່ຽວຂ້ອງກັບການຄ້າ<br>• ຈຳນວນຄົນທີ່ຕິດຕໍ່ສື່ສານກັນໄດ້ຜ່ານຊ່ອງທາງການສື່ສານ (ກອງປະຊຸມສຳມະນາ, ເວັບໄຊ, ສິ່ງພິມ) (ຜົນກະທົບ: ການຮູ້ຈັກເລື່ອງ **WTO,** ອາຊຽນ, ສູນຂໍ້ມູນຂ່າວສານການຄ້າ)<br>• ຈຳນວນເຈົ້າໜ້າທີ່ MOIC ທີ່ໃຊ້ອີເມລ໌ເປັນປະຈຳ | ອົບຮົມແລະປັດຈຸບັນແມ່ນສາມາດຈັດການຝຶກອົບຮົມເປັນພາສາລາວໄດ້.<br>• ໄດ້ສຳເລັດການທົບທວນຄືນການຈັດຕັ້ງປະຕິບັດແຜນຍຸດທະສາດການອຳນວຍຄວາມສະດວກທາງດ້ານການຄ້າ ສົກປີ 2011-2015.<br>• ແຜນດຳເນີນງານການອຳນວຍຄວາມສະດວກທາງດ້ານການຄ້າ 2017-2022 ໄດ້ຮັບການຮັບຮອງໃນເດືອນສິງຫາ 2017, ເຊິ່ງພາໄປສູ່ການສ້າງຕັ້ງ 17 ໜ່ວຍງານຈັດຕັ້ງປະຕິບັດດ້ານວິຊາການ (TIU) ຢູ່ໃນບັນດາກົມຫຼັກໆທີ່ມີສາຍສັ່ງງານຂອງຕົນ. |

[1] ບົດສຶກສາການເຊື່ອມໂຍງການຄ້າເຂົ້າສາກົນ ຂອງລາວ LTIS ແລະ ແຜນຕາຕະລາງກິດຈະກຳວຽກລະອຽດຕ້ອງສອດຄ່ອງກັນກັບແຜນອື່ນພາຍໃນກະຊວງ (ຍຸດທະສາດການສົ່ງອອກແຫ່ງຊາດ NES, DOSMEP) ແລະໄປລວງດຽວກັນກັບ NSEDP VII ແລະ ແຜນຂອງບັນດາກະຊວງສາຍຕັ້ງຕ່າງໆ (MoFA, MoF, MAF, MPI, ອົງການວິທະຍາສາດ & ເຕັກໂນໂລຊີ NAST, ພະລັງງານ ແລະ ບໍ່ແຮ່, ອົງການທ່ອງທ່ຽວແຫ່ງຊາດ NTA)

| ການແກ້ໄຂບັນຫາ | ອົງການ | ການໃຫ້ທຶນ/ ໂຄງການ | ຜົນໄດ້ມາ ໃນປີ 2021 (ການຈັດຕັ້ງປະຕິບັດນັບຕັ້ງແຕ່ 2012/13) |
|---|---|---|---|
| 1 ສ້າງ ແລະຈັດຕັ້ງປະຕິບັດຍຸດທະສາດການສື່ສານສຳລັບແຜນງານໂຄງການ TPSD | MOIC | TDF II | ໄດ້ສ້າງຍຸດທະສາດການສື່ສານ AFT ຂຶ້ນໃນປີ 2015. ປັດຈຸບັນ NIU ກຳລັງມີການປັບປຸງຍຸດທະສາດນີ້ຢູ່. ກອງປະຊຸມ TPSWG ໄດ້ຈັດຂຶ້ນເປັນງວດເພື່ອປຶກສາຫາລືບັນຫາທີ່ບັນດາທຸລະກິດເອກະຊົນມີຄວາມກັງວົນສົນໃຈຢູ່. ຈາກກອງປະຊຸມເຫຼົ່ານີ້, ໄດ້ມີການຈັດກຸ່ມໝວດໝູ່ຂອງບັນຫາຕ່າງໆ, ຈັດບຸລິມະສິດແລະ ມີການນຳເຂົ້າໄປຜ່ານຊ່ອງທາງການແກ້ໄຂໃນ LBF, ເຊິ່ງເປັນເຫດການປະຈຳປີ. ໃນປີ 2020, ເນື່ອງຈາກຜົນກະທົບຂອງ COVID-19, ແມ່ນໄດ້ຈັດສາມໃນສີ່ກອງປະຊຸມ TPSWG ທີ່ໄດ້ວາງແຜນໄວ້.<br><br>ໄດ້ຈັດ ກອງປະຊຸມ NIU-IA ປະຈຳງວດ, ກອງປະຊຸມໜ່ວຍງານ BAF ປະຈຳງວດ, ກອງປະຊຸມທົບທວນຄວາມຄືບໜ້າຂອງໂຄງການປະຈຳເຄິ່ງປີ ແລະ ກອງປະຊຸມຄະນະກຳມະການຊີ້ນຳແຜນງານຈັດຕັ້ງປະຕິບັດໂຄງການປະຈຳປີຂຶ້ນ ເພື່ອຕິດຕາມບັນດາຄວາມຄືບໜ້າຂອງການຈັດຕັ້ງປະຕິບັດໂຄງການ ແລະ ຊອກຫາທິດຊີ້ນຳທາງດ້ານນະໂຍບາຍ. |
| 2 ການສະໜັບສະໜູນດ້ານການຈັດຕັ້ງເພື່ອໃຫ້ MOIC ກາຍເປັນອົງການນຳໜ້າພາທາງດ້ານການຄ້າ. ສ້າງໃຫ້ເປັນຂະ | MOIC | TDF II | TDF II ໄດ້ສືບຕໍ່ສະໜັບສະໜູນການສ້າງຂີດຄວາມອາດສາມາດໃຫ້ແກ່ບັນດາກົມ ແລະ ອົງກອນພາຍໃຕ້ MOIC ເພື່ອໃຫ້ເປັນເຈົ້າການນຳໜ້າພາທາງໃນການປະຕິຮູບນະໂຍບາຍ ແລະ ລະບຽບການ ເຊິ່ງ |

| | | | | |
|---|---|---|---|---|
| | ບອນວິວັດທີ່ຢູ່ໃນທ່າບຸກ ໂດຍມີການເຄື່ອນໄຫວທີ່ສອດຄ່ອງກັບການປ່ຽນແປງທີ່ຈະເກີດຂຶ້ນໃນລະບົບແລະໂຄງປະກອບຂອງເສດຖະກິດແລະສະພາບແວດລ້ອມພາຍນອກ. | | | ໄດ້ນຳໄປສູ່ການພັດທະນາການຄ້າ ແລະ ພາກທຸລະກິດເອກະຊົນ. ວຽກງານ ແລະ ຄວາມຮັບຜິດຊອບທີ່ຕ້ອງການເພື່ອຈັດຕັ້ງປະຕິບັດ TDF II ແມ່ນໄດ້ລວມເຂົ້າໃນຄວາມຮັບຜິດຊອບຂອງບັນດາກົມຂອງ MOIC ໂດຍຜ່ານຊ່ອງທາງຂອງ NIU, ເຊິ່ງເຮັດໜ້າທີ່ເປັນກອງເລຂາດ້ານວິຊາການເພື່ອປຶກສາຫາລືນະໂຍບາຍລະຫວ່າງລັດຖະບານ ແລະ ຄູ່ຮ່ວມພັດທະນາພາຍໃຕ້ TPSWG. ສ່ວນຫຼາຍ, ແມ່ນເຈົ້າໜ້າທີ່ອາວຸໂສຂອງ MOIC ໄດ້ເປັນປະທານຈັດກອງປະຊຸມສະຫລຸບການມາເຄື່ອນໄຫວວຽກງານຂອງທີມງານຊ່ຽວຊານເພື່ອຊ່ວຍໜູນໂຄງການ. ນັບແຕ່ປີ 2012 ຕາມຄຳຮ້ອງຂໍຂອງກະຊວງ MOIC, ລັດຖະບານໄດ້ຍົກລະດັບໜ່ວຍງານຍ່ອຍຂອງຂະແໜງການຄ້າ ແລະ ພາກທຸລະກິດເອກະຊົນຂຶ້ນເປັນໜ່ວຍງານປຶກສາຫາລືວຽກງານດັ່ງກ່າວຢ່າງເຕັມສ່ວນ. ມັນໄດ້ກາຍເປັນເວທີທີ່ເປັນທາງການສຳລັບການປຶກສາຫາລືລະຫວ່າງລັດຖະບານແລະຄູ່ຮ່ວມພັດທະນາກ່ຽວກັບບັນຫາການພັດທະນາການຄ້າແລະພາກທຸລະກິດເອກະຊົນໃນປະເທດ. ຕັ້ງແຕ່ກາງປີ 2015, MOIC ໄດ້ຖືກມອບໝາຍໃຫ້ເປັນຈຸດປະສານງານຂອງລັດຖະບານສຳລັບ PPD ພາຍໃຕ້ກອງປະຊຸມທຸລະກິດລາວ. |
| 3 | ສ້າງ ແລະ ຈັດຕັ້ງປະຕິບັດໂຄງການຝຶກອົບຮົມພະນັກງານແບບມີການປະສານສົມທົບກັນ, ໂດຍແມ່ນລັດຖະບານ ກໍ່ຄືບັນດາຄູ່ຮ່ວມພາຍນອກເປັນຜູ້ຈັດຕັ້ງ | MOIC | TDF II | TDF II ໄດ້ສືບຕໍ່ສະໜັບສະໜູນການສ້າງຂີດຄວາມສາມາດໃຫ້ແກ່ພະນັກງານຂອງບັນດາກົມ ແລະ ກະຊວງທີ່ກ່ຽວຂ້ອງກັບໂຄງການ. |

| | | | | |
|---|---|---|---|---|
| | ປະຕິບັດ, ໂດຍສຸມໃສ່ພັດທະນາທັກສະທີ່ເໝາະສົມ ແລະ ເປັນລະບົບໃຫ້ແກ່ພະນັກງານ. | | | |
| 4 | ພັດທະນາແລະຮັກສາຖານຂໍ້ມູນເອເລັກໂຕຣນິກຂອງການສຶກສາທັງຫມົດທີ່ກ່ຽວຂ້ອງກັບ ການຄ້າ ແລະ PSD, ບົດລາຍງານແລະການນໍາສະເໜີ ແບບເປັນມິດກັບຜູ້ໃຊ້ແລະສາມາດເຂົ້າເຖິງໄດ້ | MOIC | TDF II | ສູນຂໍ້ມູນຂ່າວສານການຄ້າ, ພາຍໃຕ້ DIMEX, ມີການເກັບກໍາ ແລະ ເຜີຍແຜ່ຂໍ້ມູນຂ່າວສານການຄ້າ ແລະ ທີ່ກ່ຽວກັບການຄ້າ, ລວມທັງອັດຕາພາສີ, NTM, ມາດຕະຖານແຫ່ງຊາດ ແລະ ສາກົນ, ຂັ້ນຕອນການນໍາເຂົ້າ ແລະ ສົ່ງອອກ ແລະ ອື່ນໆ. |
| 5 | ການຫັນວຽກງານ ICT ເປັນທັນສະໄໝ ແລະ ຂະບວນການດ້ານລະບົບ ສໍາລັບ MOIC ແລະ ພະແນກການທີ່ກ່ຽວຂ້ອງຂອງແຂວງ, ລວມທັງການຮັບຮອງເອົາ ແລະຈັດຕັ້ງປະຕິບັດແຜນການຫັນວຽກງານ ICT ໃຫ້ເປັນທັນສະໄໝ. | MOIC | TDF II | ຍຸດທະສາດຂອງ MOIC ດ້ານ ICT ໄດ້ຖືກພັດທະນາຂຶ້ນໂດຍໄດ້ຮັບການສະໜັບສະໜູນຈາກ TDF II ແລະ ແຜນປະຕິບັດງານສ່ວນໃຫຍ່ທີ່ໄດ້ສະເໜີມາແມ່ນໄດ້ຮັບການຈັດຕັ້ງປະຕິບັດໂດຍການຊ່ວຍເຫຼືອທາງດ້ານເຕັກນິກ ແລະ ການເງິນຈາກການສະໜັບສະໜູນຂອງ ສປ ຈີນ. |
| 6 | ປັບປຸງຄຸນນະພາບການກໍານົດນະໂຍບາຍການຄ້າ, ໂດຍຍົກສູງການປຶກສາຫາລືດ້ານນະໂຍບາຍຢູ່ໃນ TPSWG, ໂດຍຜ່ານຄວາມເຂົ້າໃຈທີ່ດີກ່ຽວກັບການກໍານົດ/ວິຈອນນະໂຍບາຍການຄ້າ, ຫຼຸດຜ່ອນຍຸດທະສາດ ແລະ ແຜນການທີ່ຊໍ້າຊ້ອນກັນ, ເຮັດໃຫ້ມີການເນັ້ນການ | MOIC, MPI | TDF II | TPSWG ໄດ້ດໍາເນີນງານຕາມ TOR ຂອງຕົນຕັ້ງແຕ່ຕົ້ນປີ 2012. ຫວ່າງມໍ່ໆມານີ້, ການຮ່ວມມືລະຫວ່າງ SWG ແລະໂຄງສ້າງການປະສານງານ PSD ອື່ນໆເຊັ່ນ: LBF, ຄະນະກໍາມະການອໍານວຍຄວາມສະດວກທາງດ້ານການຄ້າແຫ່ງຊາດ ແລະຄະນະກໍາມະການສົ່ງເສີມການລົງທຶນໄດ້ນໍາໄປສູ່ການປະຕິບັດຄໍາສັ່ງເລກທີ 02/ນຍ ແລະ ສະບັບເລກທີ 03 ວ່າດ້ວຍການປະຕິຮູບອຸປະສັກ ແລະ ສິ່ງ |

| | | | | |
|---|---|---|---|---|
| | ປະຕິບັດຫລາຍຂຶ້ນ ແລະ ເພີ່ມທະວີການປະສານສົມທົບກັນລະຫວ່າງກະຊວງ. | | | ອຸດຕັນຕ່າງໆຂອງການດຳເນີນທຸລະກິດ ແລະ ຫ້ອງການປະຕູດຽວເພື່ອອະນຸມັດການລົງທຶນ ກໍ່ໄດ້ມີຄວາມເຂັ້ມແຂງຂຶ້ນ. |
| 7 | ການມີສ່ວນຮ່ວມຢ່າງຕັ້ງໜ້າ, ການສະໜັບສະໜູນ ແລະ ການພັດທະນາຂອງໜ່ວຍງານປຶກສາຫາລືວຽກງານການພັດທະນາຂະແໜງການຄ້າ ແລະ ພາກທຸລະກິດເອກະຊົນ ໃນການພິຈາລະນາບັນດາຂົງເຂດຫຼັກໆດ້ານນະໂຍບາຍ, ເຊັ່ນດຽວກັນກັບການສ້າງ ແລະ ຈັດຕັ້ງປະຕິບັດແຜນດຳເນີນງານ Roadmap ໃນຖານະເປັນວິໄສທັດຮ່ວມກັນດ້ານການຄ້າ ແລະ PSD ຢູ່ ສປປ ລາວ. | MOIC | TDF II | TPSWG ກະກຽມບົດລາຍງານຄວາມຄືບໜ້າປະຈຳປີຕໍ່ຂະບວນການກອງປະຊຸມໂຕະມົນ. ມັນລວບ ລວມຄຳຄຶດຄຳເຫັນຈາກສະມາຊິກຂອງຕົນກ່ຽວກັບນະໂຍບາຍທີ່ສຳຄັນຂອງລັດຖະບານ, ລວມທັງ PPD, ການປະຕິບັດກົດໝາຍວ່າດ້ວຍການລົງທຶນ, ຜົນກະທົບດ້ານການຄ້າຂອງການຫລຸດພົ້ນອອກຈາກສະຖານະພາບ LDC, ຮ່າງ NSEDP ແລະອື່ນໆ. |

| | | |
|---|---|---|
| **ຂົງເຂດການແກ້ໄຂບັນຫາ 3.3** | **3. ການເຊື່ອມສານວຽກງານການຄ້າເຂົ້າໃນກະແສຫລັກ(ຂອງການວາງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ)**<br>**ການປ່ຽນແປງໃນລະດັບຜົນໄດ້ຮັບ:** ວຽກງານການຄ້າໄດ້ກາຍເປັນກະແສຫລັກ (ໃນນະໂຍບາຍພັດທະນາປະເທດ) ຜ່ານການປັບປຸງການວາງແຜນທີ່ກ່ຽວຂ້ອງກັບການຄ້າແຫ່ງຊາດແລະໂຄງສ້າງການປຶກສາຫາລື ແລະ ການຈັດຕັ້ງປະຕິບັດແບບມີການປະສານງານກັນ (EIF ຜົນໄດ້ຮັບ 2) | • NSCEI ແລະ NTFS ເປັນກົນໄກສຳລັບການປະສານງານລະຫວ່າງກະຊວງ, ແຕ່ການປະສານງານຕ້ອງການໃຫ້ມີການເສີມຄວາມເຂັ້ມແຂງ.<br>• ການຄ້າໄດ້ຖືກນຳເຂົ້າໄປຢູ່ໃນກະແສຫລັກຂອງ NSEDP. |

| | | | |
|---|---|---|---|
| **ບັນດາຕົວຊີ້ວັດ:**<br>• ເພີ່ມທະວີການນຳໃຊ້ຄະນະກຳມະການປະສານງານລະດັບຊາດ ວ່າດ້ວຍການເຊື່ອມໂຍງເສດຖະກິດກັບສາກົນ (NSCEI) ແລະ ໂຄງສ້າງຍ່ອຍຕ່າງໆ<br>• ປັບປຸງພື້ນຖານຄວາມຮູ້ ແລະຂໍ້ມູນຂ່າວສານທີ່ກ່ຽວ ຂ້ອງກັບການຄ້າ (ຈຳນວນຄົນທີ່ໄດ້ຮັບການຝຶກອົບຮົມ)<br>• ການສຸມຄວາມສົນໃຈໃສ່ການຄ້າເພີ່ມຂຶ້ນໃນຂະບວນການຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ຂະບວນການວາງແຜນ (EIF O2.1) | | | |
| **ການແກ້ໄຂບັນຫາ** | **ອົງການ** | **ການໃຫ້ທຶນ/ ໂຄງການ** | **ຜົນໄດ້ມາ ໃນປີ 2021 (ການຈັດຕັ້ງປະຕິບັດນັບຕັ້ງແຕ່ 2012/13)** |
| 1 ການຈັດວາງແຜນງານໂຄງການ TPSD (ການຈັດຕັ້ງປະຕິບັດ DTIS ແລະການປັບປຸງໃນອະນາຄົດ) ໃຫ້ສອດຄ່ອງກັບງົບປະມານຂອງລັດຖະບານ, ການລົງທຶນ ຂອງລັດ PIP ແລະຮອບວຽນ/ວົງຈອນການຊ່ວຍເຫຼືອ. ສະໜັບສະໜູນການກະກຽມແຜນການເຄື່ອນໄຫວປະຈຳປີ ແລະ 5 ປີຂອງ MOIC | MOIC, MPI | TDF II | ຄວາມຄືບໜ້າຈຳກັດຫຼາຍໃນຂົງເຂດນີ້. |

| | | | | |
|---|---|---|---|---|
| 2 | ການມອບໝາຍໃຫ້ມີການສຶກສາຄົ້ນຄວ້າທີ່ຈະພາໄປເຖິງການວາງ NESDP VIII ໃນດ້ານ(ຍຸດທະສາດ) ຂະແໜງການທີ່ສຳຄັນ ຫຼືບັນຫາທີ່ສອດທ້ອຍກັບຂະແໜງການຕ່າງໆ (crosscutting) ແລະ ບັນຫາທີ່ກ່ຽວຂ້ອງກັບການຫລຸດພົ້ນຈາກສະຖານະພາບຂອງ LDC. | MOIC, MPI | TDF II | ພາຍໃຕ້ TRTA ທີ່ກຳລັງດຳເນີນຢູ່ ແມ່ນໄດ້ມີການມອບໝາຍໃຫ້ມີການຄົ້ນຄວ້າແລະການສຶກສາທີ່ກ່ຽວຂ້ອງຈຳນວນຫລາຍ. |
| 3 | ຊຸກຍູ້ສົ່ງເສີມການສ້າງນະໂຍບາຍການຄ້າໃຫ້ເປັນຂະບວນການຮ່ວມໂດຍມີໂຄງການຂະຫຍາຍບໍລິການໃຫ້ໄປເຖິງ SMEs, CSO ແລະ ຂັ້ນແຂວງທີ່ຍັງບໍ່ໄດ້ເປັນເປົ້າໝາຍຜ່ານມາ, ສະໜັບສະໜູນການປຶກສາຫາລືພາກລັດ-ເອກະຊົນໃນຂັ້ນທີ່ຕໍ່າກວ່າລະດັບຊາດລົງມາ (ການເປັນຄູ່ຮ່ວມເພື່ອການຮ່ວມມືພັດທະນາທີ່ມີປະສິດທິຜົນໃນສ່ວນຂອງຜູ້ເຄື່ອນໄຫວທີ່ບໍ່ສັງກັດລັດ) | MOIC, MPI | TDF II | PPD, ເຊິ່ງເປັນສ່ວນໜຶ່ງທີ່ສຳຄັນຂອງວຽກ LBF ປະຈຳປີ, ໄດ້ຮັບຄວາມສົນໃຈ ແລະ ມີຄວາມສຳຄັນໃນຖານະເປັນກົນໄກສ້າງນະໂຍບາຍທີ່ເປັນຊ່ອງທາງໃຫ້ພາກເອກະຊົນມີຄຳເຫັນຄິດຄຳເຫັນໃຫ້ແກ່ຂະບວນການສ້າງນະໂຍບາຍ ແລະ ນະໂຍບາຍທີ່ລວມເຖິງ SMEs ໂດຍຜ່ານການເປັນສະມາຊິກໃນ LNCCI ເຊິ່ງມີການຈັດຕັ້ງແບບດຽວຢູ່ໃນແຂວງຕ່າງໆ. ຢ່າງໃດກໍຕາມ, ສິ່ງດັ່ງກ່າວໄດ້ຖືກຈັດຕັ້ງຂຶ້ນຢູ່ນະຄອນຫຼວງ ແລະ ມີວິສາຫະກິດທີ່ມີຫ້ອງການປະຕິບັດງານຫຼືຫ້ອງການຕົວແທນໃນນະຄອນ ຫຼວງ ເກືອບທັງໝົດເຂົ້າຮ່ວມ. |
| 4 | ສ້າງຄວາມເຂັ້ມແຂງ ແລະ ຄວາມສົມເຫດສົມຜົນໃນການປະສານງານລະຫວ່າງກະ ຊວງຂອງບັນດາໂຄງ | MOIC ແລະ PCD | TDF II | NSCEI ແລະ NTFS ເປັນກົນໄກການປະສານງານລະຫວ່າງກະຊວງ. ແນວໃດກໍ່ຕາມ, ການທົບທວນໂຄງການສົ່ງເສີມຄວາມ |

| | | | |
|---|---|---|---|
| ປະກອບການຈັດຕັ້ງລະດັບສູງ ແລະ ຂັ້ນວິຊາການທີ່ກ່ຽວຂ້ອງເຖິງການຄ້າ. | | | ສາມາດການແຂ່ງຂັນ ແລະ ການຄ້າຂອງ ສປປ ລາວ ກາງສະໄໝ (ເດືອນທັນວາ 2020) ຊີ້ໃຫ້ເຫັນເຖິງຄວາມຕ້ອງການໃຫ້ມີການສ້າງຄວາມເຂັ້ມແຂງໃຫ້ແກ່ ການປະສານງານ. |
| | | | |
| **ຂົງເຂດ ການແກ້ໄຂ ບັນຫາ3.4** | 4. **ຂອບຂ່າຍການຄຸ້ມຄອງໂຄງການຊ່ວຍເຫລືອດ້ານການຄ້າ**<br>**ການປ່ຽນແປງໃນລະດັບຜົນໄດ້ຮັບ:** ຂອບຂ່າຍການພັດທະ ນາການຄຸ້ມຄອງການຄ້າທີ່ໃຊ້ງານໄດ້, ໝາຍວ່າມີຊັບພະ ຍາກອນພຽງພໍ ແລະ ນຳໃຊ້ວິທີການແບບແຜນງານໂດຍອີງໃສ່ຫຼັກການຂອງຖະແຫຼງການວຽງຈັນ ແລະ ວິໄສທັດຮ່ວມກັນລະຫວ່າງພາກສ່ວນທີ່ມີສ່ວນກ່ຽວຂ້ອງຂອງພາກລັດ ແລະ ເອກະຊົນ (EIF ຜົນໄດ້ຮັບ 3 & 4)<br>**ບັນດາຕົວຊີ້ວັດ:**<br>• ການຄຸ້ມຄອງບໍລິຫານ AfT ທີ່ມີປະສິດທິພາບ ແລະມີປະສິດທິຜົນ ໂດຍຜ່ານການເສີມຂະຫຍາຍຂີດຄວາມສາມາດຂອງພະນັກງານ NIU ແລະ ໜ່ວຍງານຍ່ອຍຂອງລັດເພື່ອຈັດຕັ້ງປະຕິບັດໂຄງການ (GSEUs) ເພື່ອຈັດຕັ້ງປະຕິບັດໂຄງການ AfT<br>• ແຜນງານ (ແຜນດຳເນີນງານ) ຂອງກິດຈະກຳທີ່ | | • ໄດ້ມີການລວມເອົາ NIU ເຂົ້າກັບ DPC, ທີ່ໄດ້ສ້າງຕັ້ງຂຶ້ນໃນປີ 2012 ແລະ ໄດ້ມີການປະກອບຊັບພະຍາກອນແລະພະນັກງານຂອງລັດແລະຜູ້ຊ່ຽວຊານດ້ານໂຄງການແນໃສ່ສ້າງຄວາມເຂັ້ມແຂງໃຫ້ໜ່ວຍງານ.<br>• ກອງປະຊຸມ TPSWG ໄດ້ຈັດຂຶ້ນປະຈຳປີ ແລະເປັນປະທານໂດຍລັດຖະມົນຕີ MOIC ຫຼື ຫົວໜ້າກົມ DPC. ຕໍ່ມາ, ຄວາມຖີ່ຂອງກອງປະຊຸມ TPSWG ໄດ້ເພີ່ມຂຶ້ນ. ໃນປີ 2020 ໄດ້ມີການວາງແຜນໄວ້ວ່າຈະຈັດ 4 ຄັ້ງ ແຕ່ເນື່ອງຈາກການລະບາດຂອງພະຍາດໂຄວິດ-19 ຈຶ່ງໄດ້ຈັດກອງປະຊຸມພຽງສາມຄັ້ງ.<br>• ຈຳນວນໂຄງການທີ່ຄວບຄຸມດູແລໂດຍ TEC ໄດ້ເພີ່ມຂຶ້ນ.<br>• ລັດຖະບານໄດ້ຈັດສັນງົບປະມານສົມທົບເພື່ອຈັດຕັ້ງປະຕິບັດວຽກງານທີ່ກ່ຽວຂ້ອງກັບການຄ້າ.<br>• ຈຳນວນ ແລະມູນຄ່າຂອງໂຄງການທີ່ໄດ້ຮັບທຶນຈາກຜູ້ໃຫ້ທຶນທີ່ກ່ຽວຂ້ອງກັບ DTIS Action Matrix ໄດ້ເພີ່ມຂຶ້ນ (ຈາກຕົວ |

<table>
<tr>
<td></td>
<td colspan="3">ລັດຖະບານ ແລະຜູ້ໃຫ້ທຶນເປັນຜູ້ສະໜັບສະໜູນ (EIF O3.1)<br>• ຄວາມຖີ່ຂອງການຈັດກອງປະຊຸມໜ່ວຍງານປຶກສາຫາລືຂອງຂະແໜງການຄ້າ ແລະພາກເອກະຊົນ (EIF O3.4)<br>• ຈຳນວນໂຄງການທີ່ຄວບຄຸມດູແລໂດຍຄະນະບໍລິຫານງານໂຄງການຊ່ວຍເພື່ອການຄ້າ (TEC)<br>• ການມີຂໍ້ລິເລີ່ມຮ່ວມກັນຂອງຜູ້ໃຫ້ທຶນໃນຂົງເຂດການຄ້າ (EIF O3.4)<br>• ແຜນງານພັດທະນາການຄ້າ ແລະພາກເອກະຊົນທີ່ຖືກສ້າງຂຶ້ນໂດຍອີງໃສ່ແຜນຕາຕະລາງກິດຈະກຳວຽກລະອຽດ Action Matrix (EIF O4.1)<br>• ການມີງົບປະມານຂອງລັດຖະບານໃນການຈັດຕັ້ງປະຕິບັດວຽກງານທີ່ກ່ຽວຂ້ອງກັບການຄ້າ (EIF O4.2)<br>• ຈຳນວນ ແລະມູນຄ່າຂອງໂຄງການທີ່ໄດ້ຮັບທຶນຈາກຜູ້ໃຫ້ທຶນທີ່ກ່ຽວຂ້ອງກັບແຜນຕາຕະລາງກິດຈະກຳວຽກລະອຽດຕາມບົດ DTIS (DTIS Action Matrix) (EIF O4.4)<br>• ມູນຄ່າການຊ່ວຍເຫລືອດ້ານການຄ້າ ເຊິ່ງມາຜ່ານຊ່ອງທາງຂອງພະແນກ ODA/NIU ຂອງ MOIC ມີການເພີ່ມຂຶ້ນ</td>
<td>ເລກ X ຫາ X)<br>• ມູນຄ່າການຊ່ວຍເຫຼືອດ້ານການຄ້າທີ່ຜ່ານພະແນກ ODA/NIU ຂອງ MOIC ໄດ້ເພີ່ມຂຶ້ນ (ຈາກຕົວເລກ X ຫາ X)</td>
</tr>
<tr>
<td colspan="2">ການແກ້ໄຂບັນຫາ</td>
<td>ອົງການ</td>
<td>ການໃຫ້ທຶນ/ ໂຄງການ</td>
<td>ຜົນໄດ້ມາ ໃນປີ 2021 (ການຈັດຕັ້ງປະຕິບັດນັບຕັ້ງແຕ່ 2012/13)</td>
</tr>
</table>

| | | | | |
|---|---|---|---|---|
| 1 | ປະກອບຊັບພະຍາກອນ ແລະ ເສີມສ້າງ NIU ທາງດ້ານຈຳນວນພະນັກງານລັດ ແລະ ພະນັກງານຜູ້ຊ່ຽວຊານທີ່ອຸທິດຕົນໃຫ້ແກ່ໜ່ວຍງານ ແລະ ທັງໃຫ້ການສະໜັບສະໜູນອົງກອນຈັດຕັ້ງປະຕິບັດ. | MOIC | TDF II | NIU ໄດ້ຖືກສ້າງຕັ້ງຂື້ນໃນປີ 2006 ພາຍໃຕ້ IF ແລະຫຼັງຈາກນັ້ນໄດ້ເສີມສ້າງພະນັກງານພາຍໃຕ້ໂຄງການ TDF I. TDF II ຍັງສືບຕໍ່ສະໜັບສະໜູນດ້ານການເງິນແລະຊັບພະຍາກອນທີ່ຈຳເປັນເພື່ອປະຕິບັດວຽກງານແລະໜ້າທີ່ຂອງຕົນຢ່າງມີປະສິດທິພາບ, ແຕ່ຍ້ອນວ່າມັນຍັງສືບຕໍ່ໄດ້ຮັບການສະໜັບສະໜູນຈາກຕ່າງປະເທດສ່ວນໃຫຍ່, ຈຶ່ງມີ ພະນັກງານລັດ ພຽງແຕ່ສີ່ຄົນ ທີ່ໄດ້ຖືກມອບໝາຍໃຫ້ເຮັດວຽກໃນ NIU. |
| 2 | ປັບປຸງໂຄງສ້າງການຄຸ້ມຄອງຂອບຂ່າຍການເຊື່ອມໂຍງການຄ້າເຂົ້າສາກົນຂອງລາວ (AfT) ໃຫ້ເໝາະສົມກວ່າເກົ່າກັບລະບົບຂອງລັດຖະບານ ແລະ ລະບົບລະຫວ່າງກົມທີ່ພວມດຳເນີນຢູ່ ແລະ ໃຫ້ມີຄວາມຄ່ອງຕົວຂື້ນໃນການຈັດຕັ້ງປະຕິບັດໂຄງການບຸລິມະສິດ. | MOIC | TDF II | ໃນຂະນະທີ່ຍັງສືບຕໍ່ໄດ້ຮັບທຶນຈາກພາຍນອກເປັນສ່ວນໃຫຍ່, NIU ຕໍ່ມາໄດ້ເອົາມາລວມເຂົ້າກັບ DPC, ເຊິ່ງໄດ້ສ້າງຂື້ນໃນປີ 2012, ສັງກັດໃນພະແນກການຊ່ວຍເຫລືອຂອງຕ່າງປະເທດ (FAD). ໃນຂະນະທີ່ຄວາມຮັບຜິດຊອບຂອງ NIU ແມ່ນມີການປະສານກົມກຽວກັນຢ່າງສົມບູນກັບບັນດາພະແນກພາຍໃນ DPC, ບົດບາດສຳຄັນຂອງມັນຕົ້ນຕໍ ແມ່ນມີດ້ານການເງິນ, ການຈັດຊື້ ແລະ ການບໍລິຫານໂຄງການ. ການສ້າງຕັ້ງ DPC ຕົ້ນຕໍແມ່ນເພື່ອວາງແຜນ, ຄຸ້ມຄອງ, ອຳນວຍຄວບຄຸມວຽກງານ ODA ທີ່ເຂົ້າມາສູ່ MOIC. ດັ່ງນັ້ນ, ໂດຍການລວມ NIU ເຂົ້າເປັນລະບົບການຈັດຕັ້ງຂອງກົມແລ້ວ, DPC ຈຶ່ງມີບົດບາດຍຸດທະສາດໃນການລະດົມ AfT ໂດຍລວມ, ການຄຸ້ມຄອງ, ການຄວບຄຸມດູແລ ແລະໃນການເຊື່ອມສານວຽກງານການພັດທະນາການຄ້າ ແລະພາກເອກະຊົນໃຫ້ໄປເກາະກ່າຍເຂົ້າໃນວຽກງານຫລັກຂອງບັນດາກະຊວງຕ່າງໆ. DPC |

| | | | |
|---|---|---|---|
| | | | ຍັງມີບົດບາດນຳໜ້າໃນການປະສານງານລະ ຫວ່າງກະຊວງໃນການປະຕິຮູບນະໂຍບາຍການຄ້າ ແລະການເຈລະຈາການຄ້າແລະໃນການຄຸ້ມຄອງດູແລການປະສານງານກັບພາກເອກະຊົນ ແລະຄູ່ຮ່ວມພັດທະນາທາງດ້ານບັນຫາຕ່າງໆຂອງການພັດທະ ນາການຄ້າແລະພາກເອກະຊົນ. |
| 3 ຮັບປະກັນໃຫ້ມີການຝຶກອົບຮົມພະນັກງານລັດ ແລະ ໂຄງການຢ່າງພຽງພໍໃນທັກສະທີ່ກ່ຽວຂ້ອງກັບໂຄງການ ແລະ ການຈັດ ຕັ້ງປະຕິບັດ, ພ້ອມທັງມີລະບົບການເຂົ້າເຖິງຄຳແນະນຳຈາກຜູ້ຊ່ຽວຊານສາກົນ. | | | TDF II ໄດ້ໃຫ້ທຶນຊ່ວຍເຫຼືອດ້ານວິຊາການເພື່ອສະໜັບສະໜູນບົດບາດດ້ານວິຊາການຂອງ NIU ໃນການສ້າງໂຄງການ, ການສະໜັບສະໜູນການປະຕິບັດ, ການຕິດຕາມແລະການປະເມີນຜົນ. TDF II ຍັງໄດ້ໃຫ້ການຊ່ວຍເຫຼືອດ້ານວິຊາການຢ່າງຕໍ່ເນື່ອງຕາມຄວາມຈຳເປັນ ເພື່ອຮັບປະກັນວ່າ NIU ສາມາດປະຕິບັດໜ້າທີ່ຫຼັກທາງດ້ານການເງິນຂອງຕົນຢ່າງມີປະສິດທິພາບ. |
| 4 ສະໜັບສະໜູນແລະສ້າງຄວາມເຂັ້ມແຂງໃຫ້ແກ່ໂຄງສ້າງຂອງການພັດທະນາຂະ ແໜງການຄ້າ ແລະພາກເອກະຊົນ TPSDS ແລະ ບັນດາໂຄງສ້າງຍ່ອຍຕ່າງໆ | | | ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ TPSDS, ກອງເລຂາ IF ຈຶ່ງໄດ້ຖືກຍຸບເລີກເພື່ອກຳຈັດການຊໍ້າຊ້ອນ. ກອງເລຂາ WTO, ເນື່ອງຈາກໄດ້ສຳເລັດບົດບາດຂອງຕົນໃນການເຈລະຈາເຂົ້າເປັນສະມາຊິກພາຍຫຼັງ ສປປ ລາວ ເຂົ້າເປັນສະມາຊິກ WTO ໃນປີ 2013, ໄດ້ປ່ຽນເປັນອະນຸກຳມະການປະຕິຮູບດ້ານກົດໝາຍພາຍໃຕ້ NSCEI ເພື່ອແນໃສ່ປະຕິບັດບັນດາພັນທະສັນຍາຕ່າງໆ. ກອງເລຂາການອຳນວຍຄວາມສະດວກທາງດ້ານການຄ້າແຫ່ງຊາດໄດ້ຖືກສ້າງຕັ້ງຂຶ້ນພາຍໃຕ້ DIMEX ແລະຕໍ່ມາໄດ້ຍົກລະດັບເປັນຄະນະກຳມະການອຳນວຍຄວາມສະດວກທາງດ້ານການຄ້າ ແຫ່ງຊາດ (NCTF) ພາຍ |

| | | | |
|---|---|---|---|
| | | | ໃຕ້ການເປັນປະທານຂອງຮອງນາຍົກລັດຖະມົນຕີ DPM. ກອງປະຊຸມ TPSWG ໄດ້ຈັດຂຶ້ນທຸກໆປີ ແລະເປັນປະທານໂດຍລັດຖະມົນຕີ MOIC ຫຼື ຫົວໜ້າກົມ ຂອງ DPC. ຕໍ່ມາ, ຄວາມຖີ່ຂອງກອງປະຊຸມ TPSWG ໄດ້ເພີ່ມຂຶ້ນ. ໃນປີ 2020 ໄດ້ມີການວາງແຜນໄວ້ວ່າຈະຈັດ 4 ຄັ້ງ ແຕ່ເນື່ອງຈາກການລະບາດຂອງພະຍາດໂຄວິດ-19 ຈຶ່ງໄດ້ຈັດກອງປະຊຸມແຕ່ສາມຄັ້ງ. |
| 5 ສ້າງ ແລະ ຈັດຕັ້ງປະຕິບັດວິໄສທັດຮ່ວມກັນຂອງຂະແໜງການຄ້າ ໂດຍອີງໃສ່ການປັບປຸງ DTIS ທີ່ໄດ້ຜ່ານການຮັບຮອງຄວາມຖືກຕ້ອງ: ແຜນດຳເນີນງານຂອງ DTIS ແລະ ຂອບ ຂອງວຽກງານ M&E. | MOIC | TDF II | ຂາດຂໍ້ມູນຂ່າວສານ |
| 6 ໂຄງການການຄ້າ ແລະ PSD ທັງໝົດສ່ວນໃຫຍ່ ຄວນລາຍງານໃຫ້ຄະນະບໍລິຫານງານ (ໂຄງການຊ່ວຍເຫລືອເພື່ອ) ການຄ້າ (TEC) ເຊິ່ງເປັນຄະນະຊີ້ນຳລະ ດັບສູງ ເພື່ອຮັບປະກັນຄວາມສອດຄ່ອງ ແລະ ປະສິດທິຜົນຂອງແຜນງານ ແລະ ຫຼຸດຜ່ອນພາລະຫຍຸ້ງຍາກທາງດ້ານບໍລິຫານ. | | | ໂຄງການ TRTA ທັງໝົດທີ່ໄດ້ສ້າງຂຶ້ນພາຍຫຼັງ DTISU (ສະບັບປັບປຸງ) 2012 ຈຳເປັນຕ້ອງໄດ້ຮັບເອົາໂຄງປະກອບການຄຸ້ມຄອງແບບດຽວ ແລະ ມີການລາຍງານໃຫ້ຄະນະຊີ້ນຳໂຄງການຢ່າງດຽວພາຍໃຕ້ຄະນະບໍລິຫານງານການຄ້າ (TEC), ເຊິ່ງໄດ້ປ່ຽນເປັນຄະນະກຳມະການຊີ້ນຳແຜນງານຈັດຕັ້ງປະຕິບັດໂຄງການ (PEC). |

| | | | |
|---|---|---|---|
| 7 ເພີ່ມທະວີການໃຫ້ ຄູ່ຮ່ວມພັດທະນາ DPs ນຳໃຊ້ທຶນ ແລະຊັບພະຍາກອນທີ່ມີ ຈາກກອງທຶນທີ່ມີຜູ້ໃຫ້ທຶນຫລາຍຝ່າຍຮ່ວມປະກອບທຶນຢູ່ໃນປະເທດ ແລະ ການຈັດຕັ້ງປະຕິບັດໂດຍຜ່ານໂຄງສ້າງການຄຸ້ມຄອງຂອງ AfT. | | | ກອງທຶນທີ່ມີຜູ້ໃຫ້ທຶນຫລາຍຝ່າຍຮ່ວມປະກອບທຶນຢູ່ໃນປະເທດ ໄດ້ຮັບການສ້າງຕັ້ງຂຶ້ນໃນປີ 2008 ໄດ້ສືບຕໍ່ດຳເນີນໄປເປັນໄລຍະທີ 2 ເຊິ່ງໄດ້ຮັບການສ້າງຕັ້ງໃນປີ 2013, ແລະ ໄລຍະທີ 3 ໄດ້ຮັບການສ້າງຕັ້ງໃນປີ 2019, ເຊິ່ງຈະສືບຕໍ່ໄປຮອດປີ 2024. |
| **ຂົງເຂດການແກ້ໄຂບັນຫາ 3.5** | **5. ການຕິດຕາມແລະການປະເມີນຜົນ**<br><br>**ການປ່ຽນແປງໃນລະດັບຜົນໄດ້ຮັບ:** ເປັນລະບົບຕິດຕາມກວດກາ ແລະປະເມີນຜົນທີ່ໃຊ້ງານໄດ້ ເຊິ່ງຮັບໃຊ້ຄວາມຕ້ອງການທາງດ້ານຂໍ້ມູນຂ່າວສານໃນລະດັບແຜນງານແລະໂຄງການແລະເສີມຂະຫຍາຍການບໍລິຫານງານທີ່ເນັ້ນຜົນໄດ້ຮັບເປັນຫລັກ.<br><br>**ບັນດາຕົວຊີ້ວັດ:**<br>• ຂໍ້ມູນຂ່າວສານ ແລະ ສະຖິຕິການຕິດຕາມ ທີ່ໃຊ້ປະໂຫຍດໄດ້ຢ່າງທັນເວລາ ມີໄວ້ແຈ້ງໃຫ້ຜູ້ບໍລິຫານຊາບເພື່ອການຕັດສິນໃຈ ໃນລະດັບກະຊວງ ແລະ ລະດັບໂຄງການ<br>• ການຈັດຕັ້ງປະຕິບັດ DTIS ແລະຜົນໄດ້ຮັບທີ່ກ່ຽວ ຂ້ອງແມ່ນໄດ້ຖືກປະເມີນທຸກໆປີທັງໃນແງ່ຂອງ ຜົນໄດ້ຮັບແລະທັງບັນຫາຂະບວນການໃນລະດັບແຜນງານໂຄງການ.<br>• ໄດ້ສ້າງ ແລະ ທົບທວນແຜນດຳເນີນງານ ໂດຍຖືເປັນສ່ວນໜຶ່ງຂອງແຜນງານ M&E ທີ່ກວ້າງກວ່າ ເຊິ່ງກວມເອົາແຜນ | | |

| | | | |
|---|---|---|---|
| | ງານໂຄງການສຳລັບການພັດທະນາຂະ ແໜງການຄ້າ ແລະ ພາກເອກະຊົນໃນ ສປປ ລາວ.<br>• ແຫລ່ງຊັບພະຍາກອນດ້ານການເງິນ ແລະ ຂີດຄວາມສາມາດດ້ານຊັບພະຍາກອນມະນຸດ ທີ່ພຽງພໍ ເຊິ່ງອຸທິດຕົນເພື່ອການຕິດຕາມ ແລະ ປະເມີນຜົນໃນລະດັບຂໍ້ລິເລີ່ມແຕ່ລະຢ່າງ ແລະ ໃນລະດັບໂຄງການໂດຍລວມ, ສອດຄ່ອງກັບຄວາມເຂັ້ມງວດທາງວິທີວິທະຍາທີ່ຕ້ອງການຕາມທີ່ໄດ້ຄາດເອົາໄວ້. | | |

| | ການແກ້ໄຂບັນຫາ | ອົງການ | ການໃຫ້ທຶນ/ໂຄງການ | ຜົນໄດ້ມາ ໃນປີ 2021 (ການຈັດຕັ້ງປະຕິບັດນັບຕັ້ງແຕ່ 2012/13) |
|---|---|---|---|---|
| 1 | ທົບທວນປະສົບການຂອງບັນດາປະເທດທີ່ກຳລັງພັດທະນາອື່ນໆ ໃນການສ້າງທັດສະ ນະການດຳເນີນການແບບແຜນງານໃນການພັດທະນາຂະແໜງການຄ້າ | MOIC | TDF II | ການທົບທວນໄດ້ດຳເນີນໃນປີ 2015 ແລະໄດ້ມີການດັດແກ້ບາງອັນເພື່ອເສີມສ້າງປະສິດທິຜົນຂອງ PEC ແລະຄະນະກຳມະການທົບທວນໂຄງການ. |
| 2 | ສ້າງ ແລະ ຈັດຕັ້ງປະຕິບັດແຜນການ M&E ລວມທັງດ້ານໂຄງສ້າງຂອງບົດບາດ ແລະ ຄວາມຮັບຜິດຊອບ, ການເກັບກຳຂໍ້ມູນ ແລະ ການບໍລິຫານງານ, ການວິ ເຄາະຂໍ້ມູນ, ການນຳໃຊ້ຂໍ້ມູນຂ່າວສານ ແລະ ການສ້າງຂີດຄວາມສາມາດທີ່ຕ້ອງການ. | MOIC | | NIU, ດ້ວຍການຊ່ວຍເຫຼືອຂອງຜູ້ຊ່ຽວຊານດ້ານ M&E, ໄດ້ມີຄຳແນະນຳສຳລັບວຽກງານ M&E, ເຊິ່ງປະກອບມີແມ່ແບບມາດຕະຖານສຳລັບການລາຍງານຄວາມຄືບໜ້າຂອງໂຄງການແຕ່ລະໄລຍະ, ສະເໜີແຜນການຕິດຕາມກວດກາສະເພາະ, ລະບົບການຄຸ້ມຄອງຂໍ້ມູນຂ່າວສານດ້ານ M&E, ແລະອື່ນໆ. |

| | | | | |
|---|---|---|---|---|
| 3 | ປະເມີນກາລະໂອກາດສໍາລັບການນໍາໃຊ້ວິທີວິທະຍາການປະເມີນຜົນກະທົບຕໍ່ M&E ຂອງພາກສ່ວນທີ່ໄດ້ເລືອກເອົາໃນຕ່ອງໂສ້ຜົນໄດ້ຮັບ. | MOIC | | ບໍ່ໄດ້ຈັດຕັ້ງປະຕິບັດ. |
| 4 | ປະເມີນກາລະໂອກາດສໍາລັບການຈັດຫາທຶນໂດຍອີງໃສ່ຜົນໄດ້ຮັບ ໂດຍມີການນໍາໃຊ້ການປະຕິບັດທີ່ດີມາຮອດດຽວນີ້ | MOIC | | ບໍ່ໄດ້ຈັດຕັ້ງປະຕິບັດ. |
| 5 | ພັດທະນາຂີດຄວາມສາມາດຂອງການຈັດຕັ້ງ ແລະ ພະນັກງານເປັນລາຍບຸກຄົນ ທີ່ຈໍາເປັນເພື່ອຕິດຕາມກວດກາການຈັດຕັ້ງປະຕິບັດຂໍ້ລິເລີ່ມດ້ານການຄ້າໃນລະດັບການແກ້ໄຂບັນຫາ ແລະ ເພື່ອຕີລາຄາ ການປ່ຽນແປງໃນລະດັບຜົນໄດ້ຮັບ ແລະ ເປົ້າໝາຍຂອງຂອບຂ່າຍດ້ານ M&E. | MOIC | | NIU ຮັບສະໝັກພະນັກງານ M&E ແບບເຕັມເວລາຕັ້ງແຕ່ປີ 2019. |
| 6 | ໃຫ້ແຫຼ່ງເງິນທຶນພຽງພໍສໍາລັບການຕິດຕາມ ແລະ ປະເມີນຜົນໃນລະດັບຂໍ້ລິເລີ່ມສະເພາະແຕ່ລະອັນ ແລະ ເຊັ່ນດຽວກັນກັບໃນລະດັບແຜນງານໂຄງການລວມ, ໂດຍສອດຄ່ອງກັບ | MOIC | | ພາລະບົດບາດຂອງ M&E ໄດ້ຖືກລວມເຂົ້າໄປໃນຈຸດປະສານງານໂຄງການ / ອົງປະກອບ. ສໍາລັບໂຄງການຂະໜາດໃຫຍ່ທີ່ສັບສົນ, ຍຸດທະສາດ M&E ສະເພາະໄດ້ຖືກພັດທະນາຂຶ້ນ ແລະຕິດຕາມໂດຍເຈົ້າໜ້າທີ່ M&E ທີ່ຕັ້ງຕໍ່ໃສ່ໃຈກັບວຽກ. |

| | | | |
|---|---|---|---|
| ຄວາມເຂັ້ມງວດດ້ານວິທີວິທະຍາທີ່ຈຳເປັນທີ່ໄດ້ຄາດເອົາໄວ້. | | | |
| 7 ການສຳຫຼວດວິສາຫະກິດ (ໃຫ້ປັບຕາມຄວາມຮຽກຮ້ອງຕ້ອງການ ຂອງແຜນດຳເນີນງານ ແລະ ໃຫ້ໄດ້ດຳເນີນການ): ຄັ້ງຕໍ່ໄປແມ່ນໄດ້ວາງແຜນໄວ້ສຳລັບປີ 2021 ແລະອີກຄັ້ງໜຶ່ງຄວນໄດ້ດຳເນີນການກ່ອນສິ້ນສຸດຮອບວຽນໂຄງການໃນຂັ້ນຕໍ່ໄປ. | | | ດຳເນີນໂດຍທະນາຄານໂລກ. |
| 8 ບົດສຶກສາຄວາມສະດວກໃນການດຳເນີນທຸລະກິດ ໄດ້ມີການປັບປຸງທຸກໆປີ | | | ໄດ້ດຳເນີນການໂດຍທະນາຄານໂລກ, ສະບັບສຸດທ້າຍ 2020, ຖືກຍົກເລີກໃນປີ 2021. |
| 9 ດັດຊະນີຊີ້ວັດປະສິດທິພາບທາງດ້ານໂລຊິດສະຕິກ ໄດ້ມີການປັບປຸງໃນທຸກໆ ສອງປີ | | | ບົດລາຍງານນີ້ໄດ້ມີການກະກຽມໂດຍທະນາຄານໂລກໃນທຸກໆສອງປີ. |
| 10 ການສຶກສາເວລາກວດປ່ອຍສິນຄ້າ. (ຈະໄດ້ດຳເນີນໃນປີ 2012, 2014, ແລະ 2016) | MoF/WB | | ການສຶກສາເວລາກວດປ່ອຍສິນຄ້າ ໄດ້ດຳເນີນໃນປີ 2016, 2019, 2020. |

| | | | |
|---|---|---|---|
| 11 LECS ປັບປຸງໃນປີ 2012 | | | ສູນສະຖິຕິແຫ່ງຊາດລາວ ໃນສັງກັດກະຊວງ MPI ໄດ້ດຳເນີນການສຳຫລວດ LECS ໃນທຸກໆ 5 ປີ, ແລະການສຳຫຼວດຫລ້າສຸດສຳລັບ 2017/18 ໄດ້ສຳເລັດແລະລາຍງານໄປແລ້ວ. |
| 12 ສະຖິຕິຂະແໜງການ (ອຸດສາຫະກຳປຸງແຕ່ງ, ການທ່ອງທ່ຽວ...) ຄວນເກັບກຳເປັນປະຈຳ (ຢ່າງໜ້ອຍປີລະ 1 ຄັ້ງ) | ອົງການທີ່ກ່ຽວຂ້ອງ | | ຂໍ້ມູນການທ່ອງທ່ຽວແມ່ນໄດ້ເກັບກຳແລະລາຍງານປະຈຳປີໂດຍ MOICT |
| 13 ຂໍ້ມູນການຂຶ້ນທະບຽນວິສາຫະກິດຈະຖືກປັບໃຫ້ທັນສະພາບປັດຈຸບັນໃນທຸກໆເດືອນ | | | DERM ມີຄວາມຮັບຜິດຊອບຕໍ່ການຂຶ້ນທະບຽນວິສາຫະກິດ ແລະມີການລວບລວມຂໍ້ມູນຢ່າງເປັນປົກກະຕິ. |
| 14 ການສຶກສາຜົນກະທົບສະເພາະຂອງໂຄງການຕໍ່ກັບຕົວຊີ້ວັດຂອງແຜນງານໂຄງການ | | | ບໍ່ໄດ້ຈັດຕັ້ງປະຕິບັດ. |
| 15 ລົງມືດຳເນີນການວິເຄາະ ຜະລິດຕະພັນ-ຕະຫຼາດ ຂອງວິສາຫະກິດຢ່າງເປັນປົກກະຕິ | | | ບໍ່ໄດ້ຈັດຕັ້ງປະຕິບັດ. |

**ກົມແຜນການ ແລະ ການຮ່ວມມື**
**ກະຊວງອຸດສາຫະກຳ ແລະ ການຄ້າ**
ຖະໜົນໂພນໄຊ, ຕູ້ ປ.ນ: 4107, ນະຄອນຫຼວງວຽງຈັນ, ສປປ ລາວ
ໂທ/ແຟັກ: (856 21) 41 3916
ອີເມລ: info@laosaft.org
ເວັບໄຊ: www.laosaft.org

